ຄູ່ມືຕໍ່ການຮັບໃຊ້ຂອງຜູ້ສອນສາດສະໜາ

# ຈົ່ງສອນພະກິດຕິຄຸນຂອງເຮົາ

(D&C 50:14)



“ຈົ່ງກັບໃຈ ເຈົ້າທັງຫລາຍ ບ່ອນສຸດຂອງແຜ່ນດິນໂລກ ແລະ ມາຫາເຮົາ ແລະ ຮັບບັບຕິສະມາໃນນາມຂອງເຮົາ ເພື່ອເຈົ້າຈະຖືກຊຳລະໃຫ້ບໍລິສຸດ ໂດຍການຮັບພະວິນຍານບໍລິສຸດ” (3 ນີໄຟ 27:20).

ຊື່:

ເຂດເຜີຍແຜ່ ແລະ ວັນທີຂອງການຮັບໃຊ້:

ລາຍຊື່ເຂດເຜີຍແຜ່:

ຄູ່ສອນສາດສະໜາ:

ຊື່ ແລະ ທີ່ຢູ່ຂອງຄົນທີ່ໄດ້ຮັບບັບຕິສະມາ ແລະ ການຢືນຢັນ:

# ຈົ່ງສອນພຣະກິດຕິຄຸນຂອງເຮົາ (see D&C 50:14)

ຈັດພິມ ໂດຍສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ
ເມືອງເຊົາເລັກ, ລັດຢູທາ

ໜ້າປົກ: *ໂຢຮັນບັບຕິດໃຫ້ບັບຕິດສະມາແກ່ພະເຢຊູ* © 1988 ໂດຍ Greg K. Olsen
ຈາກ Mill Pond Press ແລະ Dr. Gerry Hooper. ຫ້າມລອກແບບ.

© 2006 ໂດຍ Intellectual Reserve, Inc.
ສະຫງວນລິຂະສິດທຸກປະການ

ຈັດພິມໃນສະຫະລັດອາເມລິກາ.
ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: 1/05.
ການແປໄດ້ຮັບອະນຸຍາດ: 1/05.
ແປຈາກ *Preach My Gospel*

Laotian

36617 331

# ຈົ່ງສອນພະກິດຕິຄຸນຂອງເຮົາ (see D&C 50:14)


ຂ່າວສານຈາກຝ່າຍປະທານສູງສຸດ . . . . . . . . . . v

ຄຳນຳ: ເຮົາຈະເຮັດວິທີໃດເພື່ອຈະໃຊ້ປຶ້ມ *ຈົ່ງສອນພະກິດຕິຄຸນຂອງເຮົາ* ໃຫ້ດີທີ່ສຸດ? . . . . . . . . . . vii

1 ເປົ້າໝາຍຂອງເຮົາແມ່ນຫຍັງໃນຖານະເປັນຜູ້ສອນສາດສະໜາ? . . . . . . . . . . 1

2 ເຮົາຈະສຶກສາໃຫ້ໄດ້ຜົນ ແລະ ຕຽມສອນດ້ວຍວິທີໃດ? . . . . . . . . . . 19

3 ເຮົາຈະສຶກສາ ແລະ ສອນຫຍັງແດ່? . . . . . . . . . . 33

- ບົດຮຽນທີ 1: ຂ່າວສານຂອງການຟື້ນຟູພະກິດຕິຄຸນຂອງພະເຢຊູຄຣິດ . . . . . . . . . . 35
- ບົດຮຽນທີ 2: ແຜນແຫ່ງຄວາມລອດ . . . . . . . . . . 54
- ບົດຮຽນທີ 3: ພະກິດຕິຄຸນຂອງພະເຢຊູຄຣິດ . . . . . . . . . . 70
- ບົດຮຽນທີ 4: ພະບັນຍັດ . . . . . . . . . . 84
- ບົດຮຽນທີ 5: ກົດ ແລະ ພິທີການ . . . . . . . . . . 96

4 ເຮົາຈະຮູ້ຈັກ ແລະ ເຂົ້າໃຈພະວິນຍານໄດ້ແນວໃດ? . . . . . . . . . . 103

5 ພະຄຳພີມໍມອນມີບົດບາດຫຍັງແດ່? . . . . . . . . . . 121

6 ເຮົາຈະພັດທະນາຄຸນສົມບັດໃຫ້ເປັນຄືກັນກັບພະຄຣິດໄດ້ແນວໃດ? . . . . . . . . . . 135

7 ເຮົາຈະສາມາດຮຽນຮູ້ພາສາຂອງເຂດເຜີຍແຜ່ໃຫ້ດີຂຶ້ນໄດ້ແນວໃດ? . . . . . . . . . . 149

8 ເຮົາຈະໃຊ້ເວລາໃຫ້ເປັນປະໂຫຍດໄດ້ແນວໃດ? . . . . . . . . . . 159

9 ເຮົາຈະຊອກຫາຄົນເພື່ອສອນໄດ້ແນວໃດ? . . . . . . . . . . 179

10 ເຮົາຈະສາມາດປັບປຸງຄວາມຊຳນານໃນການສອນຂອງເຮົາໄດ້ແນວໃດ? . . . . . . . . . . 199

11 ເຮົາຈະຊ່ອຍເຫລືອຜູ້ຄົນໃຫ້ເຮັດ ແລະ ຮັກສາຄຳໝັ້ນສັນຍາໄດ້ແນວໃດ? . . . . . . . . . . 221

12 ເຮົາຈະຕຽມຄົນເພື່ອຮັບບັບຕິສະມາ ແລະ ຮັບການຢືນຢັນໄດ້ແນວໃດ? . . . . . . . . . . 231

13 ເຮົາຈະເຮັດວຽກງານກັບຜູ້ນຳສະເຕກ ແລະ ຫວອດໄດ້ແນວໃດ? . . . . . . . . . . 241

ເລກຊີ້ບອກຄຳສັບ . . . . . . . . . . 253

# ຂ່າວສານຈາກຝ່າຍປະທານສູງສຸດ

*ຜູ້ສອນສາດສະໜາທີ່ຮັກແພງ:*

*ພວກເຮົາຂໍຍ້ອງສັນລະເສີນທ່ານສຳລັບ ໂອກາດອັນຍິ່ງໃຫຍ່ທີ່ທ່ານມີເພື່ອຈະເປັນຜູ້ສອນສາດສະໜາ. ບໍ່ມີວຽກງານໃດທີ່ຈະສຳຄັນກວ່ານີ້, ຫລື ມີວຽກງານໃດທີ່ນຳຄວາມພໍໃຈທີ່ຍິ່ງໃຫຍ່ກວ່າວຽກງານນີ້ມາໃຫ້.*

*ຈຶ່ງສອນພະກິດຕິຄຸນຂອງເຮົາ ມີໄວ້ເພື່ອຊ່ອຍເຫລືອທ່ານໃຫ້ຕຽມພ້ອມດີຂຶ້ນ, ເຮັດໃຫ້ທ່ານເປັນຜູ້ສອນສາດສະໜາທີ່ເຕີບ ໂຕທາງດ້ານວິນຍານຫລາຍຂຶ້ນ, ແລະ ເຮັດໃຫ້ທ່ານເປັນຜູ້ສອນທີ່ສາມາດຊັກຊວນໄດ້ດີຂຶ້ນ. ພວກເຮົາຂໍສະໜັບສະໜູນໃຫ້ທ່ານໃຊ້ມັນທຸກໆວັນໃນການຕຽມພ້ອມສ່ວນຕົວ ແລະ ນຳຄູ່ ສອນສາດສະໜາຂອງທ່ານ, ແລະ ໃນການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດຂອງທ່ານ. ຈົ່ງສຶກສາຂໍ້ພະຄຳພີອ້າງອີງຢູ່ໃນປຶ້ມນີ້ ແລະ ຮຽນຮູ້ຄຳສອນ ແລະ ຫລັກທຳທັງຫລາຍ.*

*ພວກເຮົາຂໍທ້າທາຍທ່ານໃຫ້ເຮັດຄຳໝັ້ນສັນຍາເພີ່ມຂຶ້ນເພື່ອຊ່ອຍເຫລືອພະບິດາຜູ້ສະຖິດໃນສະຫວັນໃນວຽກງານອັນປະເສີດຂອງພະອົງ. ຜູ້ສອນສາດສະໜາທຸກໆຄົນມີບົດບາດອັນສຳຄັນໃນການຊ່ອຍນຳຄວາມເປັນອຳມະຕະ ແລະ ຊີວິດນິລັນດອນມາສູ່ມະນຸດ. (see Moses 1:39).*

*ພະຜູ້ເປັນເຈົ້າຈະໃຫ້ລາງວັນ ແລະ ພອນຢ່າງຫລວງຫລາຍແກ່ທ່ານເມື່ອທ່ານຮັບໃຊ້ພະອົງດ້ວຍຄວາມຖ່ອມຕົວ ແລະ ການອະທິຖານ. ຄວາມສຸກຢ່າງໃຫຍ່ຫລວງຄອຍຖ້າທ່ານຢູ່ຫລາຍກວ່າທີ່ທ່ານເຄີຍປະສົບມາເມື່ອທ່ານຮັບໃຊ້ໃນທ່າມກາງລູກໆຂອງພະອົງ.*

*ຝ່າຍປະທານສູງສຸດ*

# ຄຳນຳ: ເຮົາຈະເຮັດວິທີໃດເພື່ອຈະໃຊ້ປຶ້ມ *ຈົ່ງສອນພະກິດຕິຄຸນຂອງເຮົາ* ໃຫ້ດີທີ່ສຸດ?

ໝາຍເຫດ

## *ຈົ່ງສອນພະກິດຕິຄຸນຂອງເຮົາ*

ໃຫ້ໃຊ້ *ຈົ່ງສອນພະກິດຕິຄຸນຂອງເຮົາ* ເພື່ອສະໜອງຄວາມຕ້ອງການຂອງທ່ານໃນຖານະເປັນຜູ້ສອນ ສາດສະໜາ. ທ່ານສາມາດໃຊ້ເວລາຂອງການສຶກສາທັງໝົດແຕ່ລະເທື່ອເພື່ອສຶກສາປະມານສອງສາມວັກ—ຫລືສຶກສາໝົດບົດໄດ້. ທ່ານສາມາດສຶກສາບົດຕາມລຳດັບໃນປຶ້ມ ຫລື ສັບປ່ຽນລຳດັບຕາມທີ່ທ່ານຕ້ອງການ. ການປ່ຽນແປງໄດ້ນີ້ສາມາດເຮັດໃຫ້ທ່ານສຶກສາສິ່ງທີ່ທ່ານຕ້ອງການ, ໃນເວລາທີ່ທ່ານຕ້ອງການມັນ ແລະ ຕາມຄຳແນະນຳໂດຍປະທານເຜີຍແຜ່ຂອງທ່ານ.




ທຸກບົດໃນປຶ້ມ*ຈົ່ງສອນພະກິດຕິຄຸນຂອງເຮົາ* ຈະຊ່ອຍໃຫ້ທ່ານຕຽມພ້ອມທີ່ຈະເຮັດໃຫ້ເປົ້າໝາຍຂອງທ່ານ ໃນຖານະເປັນຜູ້ສອນສາດສະໜາບັນລຸຜົນສຳເລັດ. ແຕ່ວ່າ, ເມື່ອທ່ານເລີ່ມສຶກສາບົດທີ 3, ທ່ານອາດຈະ ຮູ້ສຶກແຕກຕ່າງວ່າຈະເຮັດແນວໃດ. ສ່ວນຫລາຍແລ້ວບົດເຫລົ່ານັ້ນແມ່ນກ່າວຕໍ່ທ່ານໃນຖານະເປັນຜູ້ສອນສາດສະໜາ. ບົດທີ 3 ແມ່ນກ່າວຕໍ່ຜູ້ຄົນທົ່ວໄປ. ທ່ານຈະຮຽນຮູ້ຄຳສອນໃນບົດທີ 3 (ກ) ເພື່ອເຮັດໃຫ້ຄວາມຮູ້ກ່ຽວກັບພະກິດຕິຄຸນ ແລະ ປະຈັກພະຍານຂອງທ່ານເອງເຂັ້ມແຂງຂຶ້ນ ແລະ (ຂ) ເພື່ອສອນຄົນອື່ນໆ ແລະ ຕຽມເຂົາເຈົ້າໃຫ້ເຮັດ ແລະ ຮັກສາຄຳໝັ້ນສັນຍາ ແລະ ພັນທະສັນຍາທັງຫລາຍ.

ຄຳສອນໃນບາງບົດອາດຈະຊ່ອຍທ່ານໃຫ້ສອນຜູ້ສົນໃຈ ແລະ ສະມາຊິກໃໝ່. ຕົວຢ່າງ, ບົດທີ 4, “ເຮົາຈະຮູ້ຈັກ ແລະ ເຂົ້າໃຈພະວິນຍານໄດ້ແນວໃດ?” ບົດນີ້ອາດຈະຊ່ອຍທ່ານໃຫ້ສອນຜູ້ສົນໃຈບາງຄົນກ່ຽວກັບວິທີທີ່ຈະມີປະຈັກພະຍານໂດຍອຳນາດຂອງພະວິນຍານບໍລິສຸດ. ບົດທີ 5, “ພະຄຳພີມໍມອນມີບົດບາດຫຍັງ ແດ່?” ບົດນີ້ອາດຈະຊ່ອຍທ່ານໃນການແກ້ໄຂບັນຫາທີ່ຜູ້ສົນໃຈມີກ່ຽວກັບການອ່ານພະຄຳພີມໍມອນ. ແນວຄິດ ຈາກບົດທີ 2, “ເຮົາຈະສຶກສາໃຫ້ດີຂຶ້ນ ແລະ ຕຽມສອນດ້ວຍວິທີໃດ?” ບົດນີ້ອາດຈະຊ່ອຍຜູ້ປ່ຽນໃຈເຫລື້ອມໃສໃໝ່ເຂົ້າໃຈຫລາຍຂຶ້ນຈາກການສຶກສາພະຄຳພີມໍມອນ.

*ຈົ່ງສອນພະກິດຕິຄຸນຂອງເຮົາ* ແມ່ນເຈາະຈົງໃສ່ພື້ນຖານຂອງວຽກງານເຜີຍແຜ່ສາດສະໜາ. ມັນບໍ່ມີຄຳຕອບສຳລັບຄຳຖາມທຸກຂໍ້ ຫລື ແກ້ບັນຫາໃນທຸກສະພາບການທີ່ທ່ານຈະປະສົບ. ເມື່ອທ່ານເຮັດຕາມພະວິນຍານ, ຄົ້ນຄວ້າພະຄຳພີ, ຮັກສາພະບັນຍັດ, ແລະ ໃຊ້ສິ່ງທີ່ທ່ານຮຽນຮູ້, ແລ້ວທ່ານຈະໄດ້ຮັບຜົນສຳເລັດດີທີ່ສຸດໃນວຽກງານຂອງທ່ານ.

ຈົ່ງສຶກສາທຸກບົດຕະຫລອດລະຍະການເຜີຍແຜ່ຂອງທ່ານ. ຈົ່ງໃຊ້ສິ່ງທີ່ທ່ານໄດ້ຮຽນຮູ້ມາ. ໃຫ້ປະເມີນວຽກງານຂອງທ່ານ. ຜູ້ສອນສາດສະໜາຄົນໃດທີ່ພະຍາຍາມຕຽມພ້ອມທຸກໆວັນ ແລະ ສະແຫວງຫາເພື່ອປັບປຸງຢູ່ສະເໝີ ຈະໄດ້ຮັບການຊີ້ນຳຈາກພະວິນຍານບໍລິສຸດ ແລະ ໄດ້ຮັບພອນໃນຊີວິດຂອງເຂົາເຈົ້າ.

ໝາຍເຫດ

## ບົດຮຽນຂອງຜູ້ສອນສາດສະໜາ

ທ່ານສາມາດດັດແປງບົດຮຽນທີ່ທ່ານຈະສອນໄດ້ໃນວິທີໃດກໍຕາມທີ່ຈະຊ່ອຍຜູ້ສົນໃຈໃຫ້ຕຽມພ້ອມດີທີ່ສຸດເພື່ອຈະຮັບບັບຕິສະມາ ແລະ ຮັບການຢືນຢັນ. ເປົ້າໝາຍຂອງທ່ານບໍ່ແມ່ນພຽງແຕ່ສອນບົດຮຽນເທົ່ານັ້ນ; ແມ່ນເພື່ອຊ່ອຍເຫລືອຄົນອື່ນໆໃຫ້ມາສູ່ພະຄຣິດຜ່ານການມີສັດທາໃນພະເຢຊູຄຣິດ, ການກັບໃຈ, ການຮັບບັບຕິສະມາ, ການຮັບຂອງປະທານແຫ່ງພະວິນຍານບໍລິສຸດ, ແລະ ການອົດທົນຈົນເຖິງທີ່ສຸດ. ການສອນບົດຮຽນຄວນຈະບໍ່ໃຫ້ກາຍ 45 ນາທີ. ບາງທີທ່ານຈະເຫັນວ່າມີເວລາສອນບົດຮຽນພຽງເລັກນ້ອຍເທົ່ານັ້ນ. ຖ້າເປັນດັ່ງນັ້ນ, ທ່ານອາດຈະຕ້ອງໄດ້ໄປຢ້ຽມຢາມຫລາຍໆຄັ້ງ, ແບ່ງບົດຮຽນທີ່ສອນໃຫ້ນ້ອຍລົງ.

ທ່ານສາມາດສອນບົດຮຽນຕ່າງໆໄດ້ຫລາຍວິທີ. ທ່ານຄວນພິຈາລະນາເຖິງຄວາມຕ້ອງການຂອງຜູ້ສົນໃຈ ແລະ ຮັບການຊີ້ນຳຈາກພະວິນຍານ ເພື່ອຈະຕັດສິນໃຈຢ່າງດີທີ່ສຸດວ່າ ທ່ານຈະສອນບົດຮຽນໃດ, ທ່ານຈະສອນເວລາໃດ, ແລະ ຈະໃຊ້ເວລາດົນປານໃດ. ຫ້າມບໍ່ໃຫ້ທ່ອງຈຳຄຳທັງໝົດໃນບົດຮຽນ.

## ການສຶກສາສ່ວນຕົວ, ການສຶກສາກັບຄູ່ສອນສາດສະໜາ, ການປະຊຸມທ້ອງຖິ່ນ, ແລະ ກອງປະຊຸມເຂດ

ການສຶກສາທີ່ໄດ້ຜົນລະຫວ່າງລະຍະການເຜີຍແຜ່ຂອງທ່ານຈະຊ່ອຍເຮັດໃຫ້ເປົ້າໝາຍຂອງທ່ານໃນຖານະເປັນຜູ້ສອນສາດສະໜາບັນລຸຜົນສຳເລັດ ແລະ ເຮັດໃຫ້ປະຈັກພະຍານຂອງທ່ານກ່ຽວກັບພະກິດຕິຄຸນຂອງພະເຢຊູຄຣິດເຂັ້ມແຂງຂຶ້ນ. ສີ່ຢ່າງສຳຄັນທີ່ສຸດໃນໂອກາດການສຶກສາຂອງທ່ານແມ່ນ ການສຶກສາສ່ວນຕົວ, ການສຶກສາກັບຄູ່ສອນສາດສະໜາ, ການປະຊຸມທ້ອງຖິ່ນ, ແລະ ກອງປະຊຸມເຂດ. ລາຍການປະຈຳວັນຂອງທ່ານຮ່ວມດ້ວຍເວລາສຳລັບການສຶກສາສ່ວນຕົວ ແລະ ການສຶກສາກັບຄູ່ສອນສາດສະໜາ ທຸກໆວັນ.

ລາຍການປະຈຳວັນຂອງຜູ້ສອນສາດສະໜາ*

| | |
|---|---|
| 6:30 ຕອນເຊົ້າ | ຕື່ນນອນ, ອະທິຖານ, ອອກກຳລັງກາຍ (30 ນາທີ), ແລະ ຕຽມພ້ອມສຳລັບວັນນັ້ນ. |
| 7:30 ຕອນເຊົ້າ | ກິນເຂົ້າເຊົ້າ. |
| 8:00 ຕອນເຊົ້າ | ການສຶກສາສ່ວນຕົວ: ພະຄຳພີມໍມອນ, ພະຄຳພີອື່ນໆ, ຄຳສອນຈາກບົດຮຽນຂອງ ຜູ້ສອນສາດສະໜາ, ແລະ ບົດອື່ນໆຈາກ *ຈົ່ງສອນພະກິດຕິຄຸນຂອງເຮົາ*, *ຄູ່ມືຂອງຜູ້ສອນສາດສະໜາ*, ແລະ *ຂໍ້ແນະນຳກ່ຽວກັບສຸຂະພາບສຳລັບຜູ້ສອນສາດສະໜາ*. |
| 9:00 ຕອນເຊົ້າ | ການສຶກສາກັບຄູ່ສອນສາດສະໜາ: ແບ່ງປັນສິ່ງທີ່ທ່ານໄດ້ຮຽນມາໃນລະຫວ່າງການ ສຶກສາສ່ວນຕົວ, ຕຽມສອນ, ຝຶກການສອນ, ສຶກສາບົດຕ່າງໆ ຈາກ *ຈົ່ງສອນພະກິດຕິຄຸນຂອງເຮົາ*, ກວດເບິ່ງແຜນການກັບຄູ່ສອນສາດສະໜາສຳລັບວັນນັ້ນ. |
| 10:00 ຕອນເຊົ້າ | ເລີ່ມຕົ້ນການເຜີຍແຜ່. ຜູ້ສອນສາດສະໜາທີ່ກຳລັງຮຽນພາສາອື່ນ ຄວນສຶກສາ ພາສານັ້ນເພີ່ມອີກປະມານ 30 ຫາ 60 ນາທີ, ຮ່ວມດ້ວຍການວາງແຜນກິດຈະກຳສຳລັບການຮຽນພາສາ ເພື່ອຈະໃຊ້ໃນວັນນັ້ນ.<br><br>ຜູ້ສອນສາດສະໜາສາມາດໃຊ້ເວລາໜຶ່ງຊົ່ວໂມງ ເພື່ອກິນເຂົ້າສວຍ ແລະ ສຶກສາເພີ່ມເຕີມ, ແລະ ໃຊ້ອີກຊົ່ວໂມງໜຶ່ງສຳລັບກິນເຂົ້າແລງ ເວລາໃດກໍໄດ້ທີ່ເໝາະສົມທີ່ສຸດກັບການເຜີຍແຜ່. ຕາມທຳມະດາແລ້ວ ຄວນຈະກິນເຂົ້າແລງບໍ່ໃຫ້ຊ້າເກີນກວ່າ 6:00 ໂມງແລງ. |
| 9:00 ຕອນແລງ | ກັບຄືນບ່ອນຢູ່ (ນອກຈາກວ່າຈະສອນບົດຮຽນ; ຫລັງຈາກນັ້ນໃຫ້ກັບບ່ອນຢູ່ ບໍ່ໃຫ້ເກີນ 9:30 ຕອນແລງ) ແລະ ວາງແຜນກິດຈະກຳສຳລັບວັນຕໍ່ໄປ (30 ນາທີ). ຂຽນປຶ້ມບັນທຶກສ່ວນຕົວ, ຕຽມຕົວເຂົ້ານອນ, ອະທິຖານ. |
| 10:30 ຕອນແລງ | ເຂົ້ານອນ. |

** ໃນການປຶກສາກັບຝ່າຍປະທານສາວົກເຈັດສິບ ຫລື ຝ່າຍປະທານເຂດ, ປະທານເຜີຍແຜ່ຂອງທ່ານອາດຈະ ປ່ຽນແປງລາຍການນີ້ ເພື່ອໃຫ້ເໝາະສົມກັບສະພາບການຂອງທ້ອງຖິ່ນ.*

ສິ່ງທີ່ທ່ານຮຽນຮູ້ໃນການສຶກສາສ່ວນຕົວຈະຊ່ວຍທ່ານໃນການສຶກສາກັບຄູ່ສອນສາດສະໜາ, ໃນການປະຊຸມ ທ້ອງຖິ່ນ, ແລະ ໃນກອງປະຊຸມເຂດ, ເວລາທີ່ທ່ານສາມາດສອນຄຳສອນຂອງອານາຈັກໃຫ້ກັນແລະກັນ (see D&C 88:77). ສິ່ງທີ່ທ່ານໄດ້ຮຽນຮູ້ຈາກພາກການສຶກສາ ແລະ ຈາກການປະຊຸມທ້ອງຖິ່ນຈະຊ່ວຍທ່ານໃຫ້ສອນດ້ວຍອຳນາດທາງວິນຍານ.




## ການສຶກສາສ່ວນຕົວ

ເປົ້າໝາຍຂອງການສຶກສາສ່ວນຕົວແມ່ນເພື່ອເຮັດໃຫ້ຄວາມຮູ້ ແລະ ປະຈັກພະຍານຂອງທ່ານກ່ຽວກັບ ພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ເຂັ້ມແຂງຂຶ້ນ ແລະ ຊ່ວຍທ່ານໃຫ້ຕຽມພ້ອມທີ່ຈະຕອບສະໜອງ ຄວາມຕ້ອງການຂອງຜູ້ທີ່ທ່ານສອນ. ໃນການສຶກສາສ່ວນຕົວຂອງທ່ານ, ໃຫ້ເອົາໃຈໃສ່ກັບພະຄຳພີທຸກເຫລັ້ມ ແລະ ອຸປະກອນທີ່ໄດ້ຮັບອະນຸຍາດສຳລັບຜູ້ສອນສາດສະໜາ.

- *Jesus the Christ*
- *ມູນເຊື້ອຂອງເຮົາ*
- *Our Search for Happiness*
- *True to the Faith*

ທ່ານສາມາດເຮັດໃຫ້ການສຶກສາສ່ວນຕົວໄດ້ຜົນດີຂຶ້ນເມື່ອທ່ານ:

- ອ່ານຈາກພະຄຳພີມໍມອນ ແລະ ພະຄຳພີອື່ນໆ.
- ສຶກສາຄຳສອນຈາກບົດຮຽນຂອງຜູ້ສອນສາດສະໜາ.
- ສຶກສາບົດອື່ນໆຈາກ *ຈົ່ງສອນພະກິດຕິຄຸນຂອງເຮົາ.*

## ການສຶກສາກັບຄູ່ສອນສາດສະໜາ

ເປົ້າໝາຍຂອງການສຶກສານຳຄູ່ສອນສາດສະໜາແມ່ນເພື່ອ (1) ສ້າງຄວາມເປັນໜຶ່ງໃນຄວາມເປັນຫຸ້ນສ່ວນຂອງທ່ານ ເພື່ອຈະສອນໂດຍພະວິນຍານ ແລະ (2) ເອົາໃຈໃສ່ຕໍ່ຄວາມກ້າວໜ້າຂອງຄົນທີ່ທ່ານສອນ. ທ່ານສາມາດເຮັດໃຫ້ການສຶກສາກັບຄູ່ສອນສາດສະໜາໄດ້ຮັບຜົນດີຂຶ້ນເມື່ອທ່ານ:

- ແບ່ງປັນຄວາມຮູ້ສຶກຈາກການສຶກສາສ່ວນຕົວນຳກັນ.
- ຕຽມສອນບົດຮຽນອັນທີ່ຖືກມອບໝາຍໃຫ້ນັ້ນ, ຢ້ຽມຢາມສະມາຊິກ, ຊອກຫາໂອກາດທີ່ຈະສອນຄົນ, ແລະ ເຮັດກິດຈະກຳອື່ນໆ. ສຶກສາອຸປະກອນທີ່ຈະຊ່ວຍທ່ານສອນ, ຊອກຫາຄົນ, ແລະ ເຮັດວຽກງານໃຫ້ດີຂຶ້ນກວ່າເກົ່າ. ສົນທະນານຳກັນເຖິງຜູ້ທີ່ທ່ານສອນ. ເຮັດແຜນການທີ່ຈະໃຊ້ສິ່ງທີ່ທ່ານກຳລັງຮຽນ.

ໝາຍເຫດ

ໝາຍເຫດ

- ຕະຫລອດວັນ, ໃຫ້ສົນທະນາຫລັກທຳ, ຈຸດເປົ້າໝາຍ, ຄວາມຊຳນານ, ແລະ ແຜນການຈາກການສຶກສາກັບຄູ່ສອນສາດສະໜາຕໍ່ໄປ.

## ການປະຊຸມທ້ອງຖິ່ນ

ເປົ້າໝາຍຂອງການປະຊຸມທ້ອງຖິ່ນແມ່ນເພື່ອ ສອນຄຳສອນຂອງອານາຈັກໃຫ້ກັນແລະກັນ (see D&C 88:77).

- ການປະຊຸມທ້ອງຖິ່ນໄດ້ຈັດຂຶ້ນແຕ່ລະອາທິດ ປະມານ 60 ຫາ 90 ນາທີ.
- ຜູ້ນຳປະຈຳທ້ອງຖິ່ນຈະວາງແຜນ ແລະ ເປັນຜູ້ນຳພາການປະຊຸມທ້ອງຖິ່ນ ແລະ ອາດຈະເຊື້ອເຊີນຜູ້ສອນສາດສະໜາຄົນອື່ນໆໃຫ້ຊ່ອຍສອນ.
- ການປະຊຸມທ້ອງຖິ່ນອາດຈະຮ່ວມດ້ວຍ:
  - ການແບ່ງປັນຄວາມຮູ້ສຶກຈາກການສຶກສາສ່ວນຕົວ ແລະ ການສຶກສາກັບຄູ່ສອນສາດສະໜາ.
  - ການຝຶກຝົນການສອນບົດຮຽນໃນສະພາບການທີ່ແຕກຕ່າງກັນ.
  - ການອະທິບາຍ, ການສະແດງ, ແລະ ການຝຶກຝົນຫລັກທຳ ແລະ ຄວາມຊຳນານຕ່າງໆທີ່ມີບັນລະຍາຍໄວ້ໃນ *ຈົ່ງສອນພະກິດຕິຄຸນຂອງເຮົາ*.
  - ການສົນທະນາເຖິງຄວາມກ້າວໜ້າ ແລະ ຄວາມຕ້ອງການຂອງຜູ້ສົນໃຈ.
  - ການສົນທະນາ ແລະ ການກ່າວເຖິງສິ່ງທີ່ທ້າທາຍໃນທ້ອງຖິ່ນ.
  - ການແບ່ງປັນປະສົບການ ແລະ ການສະແດງປະຈັກພະຍານກ່ຽວກັບວຽກງານເຜີຍແຜ່.
- ຜູ້ນຳປະຈຳທ້ອງຖິ່ນທັງຫລາຍອາດຈະໃຊ້ການປະຊຸມທ້ອງຖິ່ນເພື່ອຮັບລາຍງານກ່ຽວກັບຄວາມພະຍາຍາມຂອງຜູ້ສອນສາດສະໜາໃນທ້ອງຖິ່ນ. ເຂົາເຈົ້າບໍ່ຄວນຕັ້ງເປົ້າໝາຍ ຫລື ກຳນົດຈຳນວນໃຫ້ຜູ້ສອນສາດສະໜາຄົນອື່ນ.

## ກອງປະຊຸມເຂດ

ກອງປະຊຸມເຂດຈັດຂຶ້ນພາຍໃຕ້ການນຳພາຂອງປະທານເຜີຍແຜ່.

# *ຈຸດເດັ່ນຂອງ ຈົ່ງສອນພະກິດຕິຄຸນຂອງເຮົາ.*

ແຕ່ລະບົດໃນ *ຈົ່ງສອນພະກິດຕິຄຸນຂອງເຮົາ* ມີຈຸດເດັ່ນຫລາຍຢ່າງ. ຈຸດເດັ່ນເຫລົ່ານີ້ຈະຊ່ອຍເຫລືອທ່ານໄດ້ຫລາຍໃນການສຶກສາຂອງທ່ານ—ມັນບໍ່ໄດ້ບັງຄັບໃຫ້ທ່ານຮຽນຮູ້ວິທີໃດວິທີໜຶ່ງ. ຈົ່ງໃຊ້ຈຸດເດັ່ນເຫລົ່ານີ້ໃນການດັດແປງທີ່ເໝາະສົມຕາມຄວາມຕ້ອງການຂອງທ່ານ.

## ປຶ້ມບັນທຶກການສຶກສາ

*ຈົ່ງສອນພະກິດຕິຄຸນຂອງເຮົາ* ບອກທ່ານເປັນປະຈຳໃຫ້ໃຊ້ປຶ້ມບັນທຶກການສຶກສາ ເພື່ອຊ່ອຍໃຫ້ທ່ານເຂົ້າໃຈ, ເພີ່ມຄວາມແຈ່ມແຈ້ງ, ແລະ ຈື່ຈຳສິ່ງທີ່ທ່ານກຳລັງຮຽນ. ແອວເດີ ລິຊາດ ຈີ ສະກັອດ ໄດ້ສອນວ່າ, "ຄວາມຮູ້ທີ່ບັນທຶກໄວ້ຢ່າງລະອຽດເປັນຄວາມຮູ້ທີ່ໃຊ້ໄດ້ໃນເວລາທີ່ຕ້ອງການ. ຂໍ້ມູນທາງວິນຍານທີ່ສຳຄັນຄວນຈະຮັກສາໄວ້ໃນ

ບ່ອນທີ່ສັກສິດເຊິ່ງບົ່ງບອກຕໍ່ພະຜູ້ເປັນເຈົ້າວ່າທ່ານຖືມັນເປັນສິ່ງທີ່ມີຄ່າ. ວິທີນີ້ຈະເພີ່ມທະວີການໄດ້ຮັບຄວາມສະຫວ່າງຂອງທ່ານຫລາຍຂຶ້ນ." ("Acquiring Spiritual Knowledge," *Ensign*, Nov. 1993, 86). ໃຫ້ທົບທວນປຶ້ມບັນທຶກການສຶກສາຂອງທ່ານ ເພື່ອຈະຈື່ຈຳປະສົບການທາງວິນຍານ, ເຫັນແນວຄິດໃໝ່, ແລະ ຮູ້ຈັກການເຕີບໂຕຂອງທ່ານ.

ປຶ້ມບັນທຶກການສຶກສາຂອງທ່ານອາດຈະເປັນ ປຶ້ມບັນທຶກກາບແຂງ, ປຶ້ມຂຽນ, ຫລື ແຟ້ມກາບແຂງ. ໃຫ້ບັນທຶກ ແລະ ຈັດຄວາມຄິດ ແລະ ຄວາມຮູ້ສຶກຂອງທ່ານໃຫ້ເປັນລະບຽບທີ່ຈະເຂົ້າກັບວິທີທີ່ທ່ານຮຽນ. ພັດທະນາລະບົບຂອງທ່ານເອງເພື່ອຈະໃຊ້ຂໍ້ມູນໄດ້ງ່າຍໃນອານາຄົດ. ໃຫ້ໃຊ້ປຶ້ມບັນທຶກການສຶກສານີ້ເປັນປະຈຳເພື່ອທົບທວນ, ເຂົ້າຫາ, ແລະ ໃຊ້ສິ່ງທີ່ທ່ານໄດ້ຮຽນມາ. ໃຫ້ໃຊ້ປຶ້ມບັນທຶກການສຶກສາຂອງທ່ານເພື່ອບັນທຶກ ແລະ ຂຽນຄວາມຮູ້ສຶກຂອງທ່ານລະຫວ່າງການສຶກສາສ່ວນຕົວ, ການສຶກສາກັບຄູ່ສອນສາດສະໜາ, ການປະຊຸມທ້ອງຖິ່ນ, ກອງປະຊຸມເຂດ, ແລະ ການສຳພາດນຳປະທານເຜີຍແຜ່.

## ໜ້າສະຫລຸບຂໍ້ມູນ

ໜ້າສະຫລຸບຢູ່ໃນປຶ້ມ *ຈົ່ງສອນພະກິດຕິຄຸນຂອງເຮົາ* ຈະຊ່ອຍທ່ານຮຽນ. ໜ້າສະຫລຸບບາງອັນຈະເປັນການສະແດງໃຫ້ເຫັນກ່ອນ ຫລື ເປັນການສະຫລຸບຈຸດສຳຄັນ. ໜ້າສະຫລຸບອື່ນໆຊ່ອຍທ່ານໃຫ້ຕັ້ງໃຈໃສ່ຕໍ່ການສຶກສາ, ຮຽນຮູ້ຈາກພະຄຳພີ, ໃຊ້ສິ່ງທີ່ທ່ານໄດ້ຮຽນມາ, ພັດທະນາຄວາມສາມາດຂອງທ່ານ, ແລະ ຕອບສະໜອງຄວາມຕ້ອງການຂອງຄົນທີ່ທ່ານສອນ. ສ່ວນຫລາຍແລ້ວ, ໜ້າສະຫລຸບເຫລົ່ານີ້ເປັນພຽງຈຸດຂອງການເລີ່ມຕົ້ນເທົ່ານັ້ນ. ຈົ່ງອະທິຖານເພື່ອຈະສ້າງກິດຈະກຳໃນໜ້າສະຫລຸບເຫລົ່ານີ້ ໂດຍການພັດທະນາກິດຈະກຳຂອງການຮຽນແບບໃໝ່ ແລະ ຄົ້ນຄວ້າພະຄຳພີເພີ່ມເຕີມ.




**"ໃຫ້ພິຈາລະນາເລື່ອງນີ້."** ບົດສ່ວນຫລາຍເລີ່ມຕົ້ນດ້ວຍຄຳຖາມໃນໜ້າສະຫລຸບ "ໃຫ້ພິຈາລະນາເລື່ອງນີ້." ຄຳຖາມເຫລົ່ານີ້ເຈາະຈົງໃສ່ຈຸດສຳຄັນຂອງບົດ ແລະ ມີໂຄງຮ່າງສຳລັບການສຶກສາຂອງທ່ານ. ໃຫ້ໃຊ້ຄຳຖາມເຫລົ່ານີ້ເພື່ອຈັດຕັ້ງ, ເຂົ້າໃຈ, ໃຄ່ຕອງ, ແລະ ໃຊ້ສິ່ງທີ່ທ່ານຮຽນມາໃນວຽກງານຂອງທ່ານ.




**"ໃຫ້ຈື່ຈຳສິ່ງນີ້."** ສ່ວນຫລາຍແລ້ວທຸກບົດຈະຈົບດ້ວຍໜ້າສະຫລຸບ "ໃຫ້ຈື່ຈຳສິ່ງນີ້"—ເຊິ່ງເປັນຈຸດສຳຄັນທີ່ ສຸດຈາກບົດນັ້ນ. ເມື່ອທ່ານສຶກສາບົດໜຶ່ງຈົບແລ້ວ, ໃຫ້ທົບທວນຂໍ້ຄວາມເຫລົ່ານີ້ຄືນເພື່ອໃຫ້ທ່ານແນ່ໃຈວ່າທ່ານເຂົ້າໃຈຫລັກທຳສຳຄັນເຫລົ່ານີ້. ໃຫ້ປະເມີນເບິ່ງວ່າທ່ານໃຊ້ຫລັກທຳເຫລົ່ານີ້ໄດ້ດີປານໃດ, ແລະ ວາງແຜນ ທີ່ຈະໃຊ້ສິ່ງທີ່ທ່ານໄດ້ຮຽນມາ.




**"ການສຶກສາພະຄຳພີ."** ໜ້າສະຫລຸບເຫລົ່ານີ້ຊີ້ບອກທ່ານເຖິງຂໍ້ອ້າງອີງທີ່ສາມາດສ້າງຄວາມເຂົ້າໃຈ ແລະ ປະຈັກພະຍານຂອງທ່ານໄດ້. ຈົ່ງເຮັດຕາມຂໍ້ອ້າງອີງເຫລົ່ານີ້ໂດຍການຄົ້ນຄວ້າຂໍ້ພະຄຳພີອື່ນໆຕື່ມອີກ. ຖາມຕົວເອງຄຳຖາມອື່ນໆຕື່ມອີກ ທີ່ຈະຊ່ອຍທ່ານໃຫ້ໄດ້ຮັບຄວາມຮູ້ເພີ່ມເຕີມ ແລະ ໃຊ້ສິ່ງທີ່ທ່ານຮຽນມາ.

ໝາຍເຫດ

ໝາຍເຫດ




**"ກິດຈະກຳ."** ສ່ວນຫລາຍແລ້ວ ເກືອບທຸກບົດຈະມີກິດຈະກຳສຳລັບການສຶກສາສ່ວນຕົວ ແລະ ການສຶກສາກັບຄູ່ສອນສາດສະໜາ ເພື່ອເຮັດໃຫ້ການຮຽນ ແລະ ການນຳໃຊ້ຂອງທ່ານດີຂຶ້ນກວ່າເກົ່າ. ໃຫ້ເຮັດກິດຈະກຳເຫລົ່ານີ້ຊ້ຳຄືນຕະຫລອດລະຍະທີ່ທ່ານເປັນຜູ້ສອນສາດສະໜາ. ທ່ານຈະໄດ້ຄວາມຮູ້ໃໝ່ແຕ່ລະຄັ້ງທີ່ທ່ານເຮັດ ເພາະຄວາມຕ້ອງການຂອງທ່ານ—ແລະ ຄວາມຕ້ອງການຂອງຄົນທີ່ທ່ານສອນ—ຈະປ່ຽນແປງ.




**ໜ້າສະຫລຸບສີແດງ.** ໜ້າສະຫລຸບເຫລົ່ານີ້ມີຂໍ້ມູນ ແລະ ຄຳແນະນຳທີ່ສຳຄັນສຳລັບການສອນ ແລະ ການເຜີຍແຜ່ໃນສະພາບການຕ່າງໆ.

## ເລື່ອງ

ເລື່ອງທັງໝົດໃນ *ຈົ່ງສອນພະກິດຕິຄຸນຂອງເຮົາ* ເປັນເລື່ອງຈິງ, ເຖິງແມ່ນວ່າຊື່ຂອງຜູ້ຄົນສ່ວນຫລາຍໄດ້ຖືກປ່ຽນແປງ. ແຕ່ລະເລື່ອງໄດ້ຍົກຕົວຢ່າງເຖິງຫລັກທຳຫລາຍໆຂໍ້ທີ່ພົວພັນກັບວຽກງານເຜີຍແຜ່. ເມື່ອທ່ານອ່ານເລື່ອງເຫລົ່ານີ້, ໃຫ້ຊອກຫາຫລັກທຳທີ່ເລື່ອງເຫລົ່ານີ້ໄດ້ສອນ.

## ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

ແຕ່ລະບົດສະຫລຸບດ້ວຍແນວຄິດເພີ່ມເຕີມສຳລັບ ການສຶກສາສ່ວນຕົວ, ການສຶກສາກັບຄູ່ສອນ ສາດສະໜາ, ການປະຊຸມທ້ອງຖິ່ນ, ແລະ ກອງປະຊຸມເຂດ. ແຫລ່ງຊ່ອຍເຫລືອທີ່ສົມບູນທີ່ມີກິດຈະກຳສຳລັບ ການຮຽນ ໄດ້ມີຕົວຢ່າງເຖິງວິທີທີ່ຈະຮຽນໃຫ້ດີຂຶ້ນ. ໃຫ້ຮູ້ຈັກສ້າງສັນ ແລະ ສະແຫວງຫາການດົນໃຈເພື່ອຈະສ້າງກິດຈະກຳເພີ່ມເຕີມທຸກເວລາທີ່ທ່ານສຶກສາ ຫລື ສອນສ່ວນໃດໜຶ່ງໃນພາກເຫລົ່ານີ້. ເຮັດກິດຈະກຳເຫລົ່ານີ້ໃຫ້ແລ້ວ ຫລາຍໆເທື່ອລະຍະທີ່ທ່ານເປັນຜູ້ສອນສາດສະໜາ.




## ຜູ້ສອນສາດສະໜາທີ່ຮັບໃຊ້ໃນສາຂາ ແລະ ທ້ອງຖິ່ນ

ຜູ້ສອນສາດສະໜາຫລາຍໆຄົນໄດ້ຮັບໃຊ້ໃນສາຂາ ແລະ ທ້ອງຖິ່ນ. ເຖິງແມ່ນວ່າປຶ້ມນີ້ໃຊ້ຄຳວ່າ *ຫວອດ* ແລະ *ສະເຕກ*, ແຕ່ຫລັກທຳ ແລະ ວິທີທັງຫລາຍກໍແມ່ນສຳລັບ *ສາຂາ* ແລະ *ທ້ອງຖິ່ນ* ຄືກັນ. ປະທານເຜີຍແຜ່ຈະໃຫ້ຄຳແນະນຳເຖິງການປ່ຽນແປງທີ່ທ່ານຈະຕ້ອງໄດ້ເຮັດ ໃນການເຮັດວຽກນຳຜູ້ນຳຂອງສາຂາ ແລະ ທ້ອງຖິ່ນ.

## ໃຊ້ໂດຍຜູ້ສອນສາດສະໜາປະຈຳຫວອດ ແລະ ຜູ້ນຳທັງຫລາຍ

*ຈົ່ງສອນພະກິດຕິຄຸນຂອງເຮົາ* ແມ່ນປຶ້ມສຳລັບຜູ້ສອນສາດສະໜາເຕັມເວລາຂອງສາດສະໜາຈັກ. ແຕ່ວ່າ, ຫລັກທຳ ແລະ ຄຳສອນຕ່າງໆທີ່ມີຢູ່ໃນນີ້ກໍແມ່ນສຳລັບຜູ້ສອນສາດສະໜາປະຈຳຫວດ ແລະ ຜູ້ນຳທັງຫລາຍຄືກັນ ເມື່ອເຂົາເຈົ້າສະແຫວງຫາເພື່ອສ້າງອານາຈັກຂອງພະຜູ້ເປັນເຈົ້າ. ການສຶກສາປຶ້ມນີ້ເປັນປະຈຳຈະສາມາດເຮັດໃຫ້ຄວາມຮັບຜິດຊອບ ຂອງເຂົາເຈົ້າປະສົບຜົນສຳເລັດໃນຖານະເປັນສະມາຊິກທີ່ເຮັດການເຜີຍແຜ່ ແລະ ຈະເສີມສ້າງຄວາມເປັນໜຶ່ງກັບຜູ້ສອນສາດສະໜາເຕັມເວລານຳອີກ.

ໝາຍເຫດ

ໝາຍເຫດ



ແດນ ໂຈນ, ໜຶ່ງໃນຈຳນວນຜູ້ສອນສາດສະໜາທີ່ເກັ່ງກ້າທີ່ສຸດໃນຍຸກສະໄໝນີ້, ສອນພະກິດຕິຄຸນໃນປະເທດ ແວວ.

# ເປົ້າໝາຍຂອງເຮົາແມ່ນຫຍັງໃນຖານະເປັນຜູ້ສອນສາດສະໜາ?

ໝາຍເຫດ

## ເປົ້າໝາຍຂອງທ່ານ

ເຊື້ອເຊີນຄົນອື່ນໆໃຫ້ມາສູ່ພະຄຣິດ ໂດຍຊ່ອຍເຫລືອເຂົາເຈົ້າໃຫ້ໄດ້ຮັບພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ ຜ່ານການມີສັດທາໃນພະເຢຊູຄຣິດ ແລະ ການຊົດໃຊ້ຂອງພະອົງ, ການກັບໃຈ, ການຮັບບັບຕິສະມາ, ແລະ ການຮັບເອົາຂອງປະທານແຫ່ງພະວິນຍານບໍລິສຸດ, ແລະ ການອົດທົນຈົນເຖິງທີ່ສຸດ.

## ໃຫ້ພິຈາລະນາເລື່ອງນີ້

- ເປົ້າໝາຍຂອງເຮົາແມ່ນຫຍັງໃນຖານະເປັນຜູ້ສອນສາດສະໜາ?
- ພະກິດຕິຄຸນແມ່ນຫຍັງ?
- ເປັນຫຍັງພວກເຮົາຈຶ່ງສອນພະກິດຕິຄຸນ?
- ເປັນຫຍັງເຮົາຕ້ອງສອນດ້ວຍພະລັງ ແລະ ອຳນາດ?
- ຂ່າວສານຂອງການຟື້ນຟູແມ່ນຫຍັງ? ເປັນຫຍັງມັນຈຶ່ງສຳຄັນແທ້?
- ແມ່ນຫຍັງຄືທີ່ຮັບຜິດຊອບຂອງເຮົາໃນການຊ່ອຍເຫລືອຄົນອື່ນໆໃຫ້ປ່ຽນໃຈເຫລື້ອມໃສ?
- ເຮົາຈະຮູ້ໄດ້ແນວໃດວ່າເຮົາເປັນຜູ້ສອນສາດສະໜາທີ່ປະສົບຜົນສຳເລັດ?

## ໜ້າທີ່ມອບໝາຍຂອງທ່ານໃນການສອນພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ຂອງພະເຢຊູຄຣິດ

ທ່ານຖືກອ້ອມລ້ອມດ້ວຍຜູ້ຄົນ. ທ່ານຍ່າງກາຍເຂົາເຈົ້າຢູ່ຫົນທາງ, ຢ້ຽມຢາມເຂົາເຈົ້າໃນບ້ານຂອງເຂົາເຈົ້າ, ແລະ ເດີນທາງທ່າມກາງເຂົາເຈົ້າ. ເຂົາເຈົ້າທຸກໆຄົນເປັນລູກຂອງພະເຈົ້າ, ເປັນອ້າຍເອື້ອຍນ້ອງຂອງທ່ານ. ພະເຈົ້າຮັກເຂົາເຈົ້າເໝືອນກັນກັບພະອົງຮັກທ່ານ. ຫລາຍໆຄົນນີ້ສະແຫວງຫາເປົ້າໝາຍຂອງຊີວິດ. ເຂົາເຈົ້າເປັນຫ່ວງນຳຄອບຄົວຂອງເຂົາເຈົ້າ. ເຂົາເຈົ້າຕ້ອງການຮູ້ສຶກເປັນພາກສ່ວນເຊິ່ງມາຈາກການຮູ້ວ່າເຂົາເຈົ້າເປັນລູກຂອງພະເຈົ້າ ແລະ ເປັນສະມາຊິກຂອງ

© 1993 Clark Kelley Price. ຫ້າມລອກແບບ.

ໝາຍເຫດ

ຄອບຄົວນິລັນດອນຂອງພະອົງ. ເຂົາເຈົ້າຕ້ອງການຄວາມຮູ້ສຶກປອດໄພໃນ ໂລກທີ່ສິນທຳໄດ້ຖືກປ່ຽນແປງ. ເຂົາເຈົ້າຕ້ອງການຄວາມສັນຕິໃນໂລກນີ້ ແລະ ຊີວິດນິລັນດອນໃນໂລກທີ່ຈະມາເຖິງ (see D&C 59:23), ແຕ່ເຂົາເຈົ້າໄດ້ຖືກກັນໄວ້ຈາກຄວາມຈິງເພາະເຂົາບໍ່ຮູ້ວ່າຈະຊອກຫາມັນຢູ່ໃສ (see D&C 123:12).

ພະກິດຕິຄຸນຂອງພະເຢຊູຄຣິດທີ່ຖືກຟື້ນຟູຄືນມາໃໝ່ຜ່ານສາດສະດາ ໂຢເຊັບ ສະມິດ ຈະໃຫ້ພອນແກ່ຄອບຄົວຂອງເຂົາເຈົ້າ, ຈະສະໜອງຄວາມຕ້ອງການທາງວິນຍານຂອງເຂົາເຈົ້າ, ແລະ ຈະຊ່ອຍໃຫ້ຄວາມປາດຖະໜາທີ່ເລິກຊຶ້ງຂອງເຂົາເຈົ້າປະສົບຜົນສຳເລັດ. ເຖິງແມ່ນວ່າເຂົາເຈົ້າອາດຈະບໍ່ຮູ້ວ່າເປັນຫຍັງ, ແຕ່ເຂົາເຈົ້າຕ້ອງການປົດປ່ອຍຈາກຄວາມຮູ້ສຶກຜິດເຊິ່ງມາຈາກຄວາມຜິດ ແລະ ບາບ. ເຂົາເຈົ້າຕ້ອງການປະສົບກັບຄວາມສຸກຂອງການ ໄຖ່ໂດຍໄດ້ຮັບການໃຫ້ອະໄພຈາກບາບຂອງເຂົາເຈົ້າ ແລະ ມີຂອງປະທານແຫ່ງພະວິນຍານບໍລິສຸດ.

ໃນຖານະເປັນຕົວແທນທີ່ໄດ້ຮັບອະນຸຍາດຈາກພະເຢຊູຄຣິດ, ທ່ານສາມາດສອນຄົນດ້ວຍພະລັງ ແລະ ອຳນາດ ວ່າ "ການໄຖ່ຈຶ່ງມີມາເຖິງ ແລະ ໂດຍພະເມຊີອາອົງບໍລິສຸດ," ແລະ ວ່າບໍ່ມີໃຜ "ຈະຢູ່ບ່ອນປະທັບຂອງພະເຈົ້າ ນອກຈາກເປັນຄຸນຄວາມດີ ແລະ ພະເມດຕາ ແລະ ພະຄຸນຂອງພະເມຊີອາອົງບໍລິສຸດ" (2 ນີໄຟ 2:6, 8). ເມື່ອຜູ້ຄົນຍອມຮັບພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ຂອງພະເຢຊູຄຣິດ ແລະ ຮັບບັບຕິສະມາ ແລະ ຮັບການຢືນຢັນໂດຍອຳນາດຖານະປະໂລຫິດແລ້ວ, ເຂົາເຈົ້າຈະສາມາດໝັ້ນໃຈວ່າ ເຂົາເຈົ້າ "ຈະບໍ່ຖືກປະຖິ້ມຕະຫລອດໄປ" (ພະຄຳພີມໍມອນ, ໜ້າຫົວເລື່ອງ).



ເມື່ອການເຂົ້າໃຈຂອງທ່ານກ່ຽວກັບການຊົດໃຊ້ຂອງພະເຢຊູຄຣິດເຕີບໃຫຍ່ຂຶ້ນ, ຄວາມປາດຖະໜາຂອງທ່ານທີ່ຈະແບ່ງປັນພະກິດຕິຄຸນຈະເພີ່ມທະວີຫລາຍຂຶ້ນ. ທ່ານຈະຮູ້ສຶກຄືກັນກັບ ລີໄຮ ກ່ຽວກັບ "ຄວາມສຳຄັນອັນຍິ່ງໃຫຍ່ . . . ທີ່ເຮັດໃຫ້ສິ່ງເຫລົ່ານີ້ເປັນທີ່ຮູ້ຈັກແກ່ຊາວໂລກ" (2 ນີໄຟ 2:8).

ປະທານ ເອດສະລາ ແທັບ ເບັນສັນ ໄດ້ສອນວ່າ: "ພວກເຮົາໄດ້ຮັບບັນຊາຈາກພະເຈົ້າໃຫ້ນຳພະກິດຕິຄຸນນີ້ໄປທົ່ວໂລກ. ອຸດົມການນີ້ແມ່ນສິ່ງທີ່ຕ້ອງເຕົ້າໂຮມເຮົາໃນວັນນີ້. ມີແຕ່ພະກິດຕິຄຸນເທົ່ານັ້ນທີ່ຈະຮັກສາໂລກ ຈາກໄພພິບັດຂອງການທຳລາຍຕົວມັນເອງ. ມີແຕ່ພະກິດຕິຄຸນເທົ່ານັ້ນທີ່ຈະໂຮມມະນຸດທຸກເຊື້ອຊາດເຜົ່າ ແລະ ສັນຊາດຢ່າງສະຫງົບ. ມີແຕ່ພະກິດຕິຄຸນເທົ່ານັ້ນທີ່ຈະນຳຄວາມປິຕິຍິນດີ, ຄວາມສຸກ, ແລະ ຄວາມລອດມາສູ່ຄອບຄົວຂອງມະນຸດ" (*The Teachings of Ezra Taft Benson* [1988], 167).

ທ່ານໄດ້ຖືກເອີ້ນໃຫ້ເປັນຕົວແທນຂອງພະເຢຊູຄຣິດໃນການຊ່ອຍເຫລືອຜູ້ຄົນໃຫ້ສະອາດຈາກບາບຂອງເຂົາເຈົ້າ. ທ່ານເຮັດສິ່ງນີ້ໂດຍການເຊື້ອເຊີນເຂົາເຈົ້າໃຫ້ມາສູ່ພະເຢຊູຄຣິດ ແລະ ປ່ຽນໃຈເຫລື້ອມໃສຕໍ່ພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ຂອງພະອົງ. ກ່ອນຈະມາສູ່ພະຜູ້ຊ່ອຍໃຫ້ລອດໄດ້ນັ້ນ ເຂົາເຈົ້າຕ້ອງມີສັດທາໃນພະອົງຈົນເຖິງການ ກັບໃຈ—ເຮັດການປ່ຽນແປງທີ່ຈຳເປັນເພື່ອຈະນຳຊີວິດຂອງຕົນໃຫ້ສອດຄ່ອງກັບການສອນຂອງພະອົງ. ທ່ານສາມາດຊ່ອຍຜູ້ຄົນໃຫ້ພັດທະນາສັດທາໂດຍການສອນພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ແກ່ເຂົາເຈົ້າ ໂດຍພະວິນຍານ ແລະ ເຊື້ອເຊີນເຂົາເຈົ້າໃຫ້ເຮັດຄຳໝັ້ນສັນຍາທີ່ຈະດຳລົງຊີວິດຕາມຄຳສອນຂອງພະກິດຕິຄຸນ. ການຮັກສາຄຳໝັ້ນສັນຍາຕຽມເຂົາເພື່ອເຮັດພັນທະສັນຍາແຫ່ງການຮັບບັບຕິສະມາ ແລະ ຮັບການຢືນຢັນ ແລະ ຮັບເອົາຂອງປະທານອັນລ້ຳຄ່າແຫ່ງພະວິນຍານບໍລິສຸດ. ສິ່ງເຫລົ່ານີ້ເຮັດໃຫ້ "ມະນຸດທຳມະດາ" ດີຂຶ້ນ ແລະ ກາຍເປັນສິດທິຊົນ "ໂດຍການຊົດໃຊ້ຂອງພະຄຣິດ ພະຜູ້ເປັນເຈົ້າ" (ໂມໄຊຢາ 3:19).

ໝາຍເຫດ

**ກິດຈະກໍາ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ**

ເບິ່ງຮູບ ຕົ້ນໄມ້ແຫ່ງຊີວິດ ໃນໜ້ານີ້ເມື່ອທ່ານສຶກສາ ນິມິດກ່ຽວກັບຕົ້ນໄມ້ແຫ່ງຊີວິດທີ່ມີຢູ່ໃນ 1 Nephi 8 ແລະ 11. ໃນ ນິມິດນີ້, ຕົ້ນໄມ້ແຫ່ງຊີວິດເປັນສັນຍາລັກເຖິງຄວາມຮັກຂອງພະເຈົ້າ (see 1 Nephi 11:21–22).

- ລີໄຮໄດ້ປາດຖະໜາອັນໃດແດ່ ຫລັງຈາກເພິ່ນໄດ້ກິນໝາກໄມ້ນັ້ນ? (See 1 Nephi 8:10–18.)
- ໃນນິມິດນັ້ນ, ຜູ້ຄົນຕ້ອງເຮັດແນວໃດເພື່ອຈະສາມາດກິນໝາກໄມ້ນັ້ນ? ເຮົາຄວນເຮັດແນວໃດເພື່ອຈະໄດ້ຮັບພອນທັງໝົດຂອງການຊົດໃຊ້? ຄໍາໝັ້ນສັນຍາ ແລະ ພັນທະສັນຍາຊ່ວຍເຮົາໃຫ້ໄດ້ຮັບພອນເຫລົ່ານີ້ ໄດ້ດ້ວຍວິທີໃດ?
- ໃນຖານະເປັນຜູ້ສອນສາດສະໜາ, ທ່ານມີໜ້າທີ່ແນວໃດເພື່ອຈະຊ່ວຍຄົນອື່ນໆໃຫ້ພົບ ແລະ ຮັບກິນໝາກໄມ້ແຫ່ງພະກິດຕິຄຸນ?

## ພະກິດຕິຄຸນເປັນພອນແກ່ຄອບຄົວ

ຂ່າວສານຂອງການຟື້ນຟູພະກິດຕິຄຸນຂອງພະເຢຊູຄຣິດເປັນພອນແກ່ຄອບຄົວ. ຍ້ອນການຟື້ນຟູ ເຮົາຈຶ່ງເຂົ້າໃຈເຖິງຈຸດປະສົງຂອງພະເຈົ້າສໍາລັບຄອບຄົວ: "ແຜນແຫ່ງຄວາມສຸກຂອງພະຜູ້ເປັນເຈົ້າ ເຮັດໃຫ້ຄວາມສໍາພັນຂອງຄອບຄົວຍືນຍົງຕໍ່ໄປຫລັງຈາກຄວາມຕາຍ. ພິທີການອັນສັກສິດ ແລະ ພັນທະສັນຍາຕ່າງໆທີ່ມີໄວ້ໃນພະວິຫານ ໄດ້ເປີດໂອກາດໃຫ້ຜູ້ຄົນສາມາດກັບຄືນໄປຫາທີ່ປະທັບຂອງພະເຈົ້າ ແລະ ເປີດໂອກາດໃຫ້ຄອບຄົວຢູ່ຮ່ວມກັນຊົ່ວນິລັນດອນໄດ້" ("ຄອບຄົວ: ການປະກາດຕໍ່ໂລກ," ວັກທີ 3).

> *"ວຽກງານສໍາຄັນທີ່ສຸດຂອງພະຜູ້ເປັນເຈົ້າທີ່ທ່ານສາມາດເຮັດໄດ້ ແມ່ນຢູ່ພາຍໃນຝາເຮືອນຂອງທ່ານເອງ."*
>
> – ປະທານ ແຮໂລນ ບີ ລີ
>
> THE TEACHINGS OF HAROLD B. LEE, SEL. CLYDE J. WILLIAMS (1996), 280

ໃນໂລກ, ການພົວພັນໃນຄອບຄົວສາມາດເປັນແຫລ່ງຂອງຄວາມສຸກທີ່ຍິ່ງໃຫຍ່ທີ່ສຸດ. ຊາຕານໄດ້ພະຍາຍາມໂຈມຕີຄອບຄົວໃນຍຸກທະວີທີຕ່າງໆ ແລະ ຫລາຍໆຄອບຄົວໄດ້ຖືກທໍາລາຍ. ຂ່າວສານຂອງພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ຂອງພະເຢຊູຄຣິດເຮັດໃຫ້ຄອບຄົວສາມາດຢູ່ຮ່ວມກັນດຽວນີ້ ແລະ ໃນຊົ່ວນິລັນດອນ. ໂດຍການດໍາລົງຊີວິດຕາມຫລັກທໍາຂອງພະກິດຕິຄຸນ, ຄອບຄົວຈະສາມາດປະສົບກັບຄວາມສະຫງົບ, ຄວາມປິຕິຍິນດີ, ແລະ ຮູ້ສຶກເປັນຕົວຂອງຕົວເອງໃນຊີວິດນີ້. ຜ່ານຄວາມສະຫວ່າງຂອງພະກິດຕິຄຸນ, ຄອບຄົວ ຈະສາມາດແກ້ໄຂບັນຫາການເຂົ້າໃຈຜິດ, ການໂຕ້ຖຽງ, ແລະ ການທ້າທາຍ. ຄອບຄົວທີ່ໄດ້ຖືກແບ່ງແຍກຍ້ອນການບໍ່ລົງເອີ່ຍກັນ ກໍສາມາດຄືນດີໄດ້ຜ່ານການກັບໃຈ, ການໃຫ້ອະໄພ, ແລະ ການມີສັດທາໃນອໍານາດຂອງການຊົດໃຊ້ຂອງພະເຢຊູຄຣິດ. "ຄອບຄົວຈະມີຄວາມສຸກ ກໍຕໍ່ເມື່ອເຂົາເຈົ້າດໍາເນີນຊີວິດຕາມຄໍາສອນຂອງອົງພະເຢຊູຄຣິດເຈົ້າ. ການແຕ່ງງານ ແລະ ຄອບຄົວຈະມີຄວາມສໍາເລັດໄດ້ໃນຊີວິດກໍຕໍ່ເມື່ອເຂົາເຈົ້າໝັ້ນຄົງຢູ່ໃນຫລັກທໍາຂອງສັດທາ, ການອະທິຖານ, ການກັບໃຈ, ການໃຫ້ອະໄພ, ການນັບຖື, ຄວາມຮັກ, ຄວາມເມດຕາ, ວຽກງານ, ແລະ ກິດຈະກໍາທີ່ໃຫ້ການພັກຜ່ອນຢ່ອນອາລົມຕ່າງໆ" ("ຄອບຄົວ: ການປະກາດຕໍ່ໂລກ," ວັກທີ 7).

ຈົ່ງພະຍາຍາມຊອກຫາ ແລະ ສອນຄອບຄົວ—ທີ່ມີພໍ່, ແມ່, ແລະ ລູກ—ຜູ້ທີ່ສາມາດສົ່ງເສີມກັນແລະກັນ ໃນການດໍາລົງຊີວິດຕາມພະກິດຕິຄຸນ ແລະ ໃນທີ່ສຸດ ຜະນຶກເຂົ້າກັນເປັນຄອບຄົວໂດຍອໍານາດຖານະປະໂລຫິດ ທີ່ໄດ້ຖືກຟື້ນຟູຄືນມາໃໝ່.

## ການສອນໂດຍພະວິນຍານ

ເພາະພະກິດຕິຄຸນຂອງພະເຢຊູຄຣິດເປັນ "ລິດອໍານາດຂອງພະເຈົ້າເຊິ່ງຊ່ອຍທຸກຄົນທີ່ເຊື່ອໃຫ້ໄດ້ພົ້ນ" (ໂລມ 1:16), ສະນັ້ນຂ່າວສານຂອງການຟື້ນຟູພະກິດຕິຄຸນຕ້ອງໄດ້ສອນໂດຍ ອໍານາດອັນສັກສິດ—ເຊິ່ງແມ່ນອໍານາດຂອງພະວິນຍານບໍລິສຸດ, ເຊິ່ງເປັນສະມາຊິກຜູ້ທີສາມໃນຝ່າຍພະເຈົ້າ. ສ່ວນຫລາຍພະອົງໄດ້ຖືກເອີ້ນວ່າ ພະວິນຍານ ແລະ ບົດບາດຂອງພະອົງອີກຢ່າງໜຶ່ງແມ່ນເພື່ອສອນ ແລະ ເປັນພະຍານເຖິງຄວາມຈິງ. ເມື່ອທ່ານສອນໂດຍອໍານາດ, ພະວິນຍານບໍລິສຸດຈະ:

ໝາຍເຫດ

- ສອນທ່ານເຖິງຄວາມຈິງອັນໃໝ່ ແລະ ເຮັດໃຫ້ທ່ານຈື່ຈຳຄຳສອນທີ່ທ່ານໄດ້ສຶກສາແລ້ວ (ເບິ່ງ ໂຢຮັນ 14:26).
- ໃຫ້ຄຳເວົ້າທີ່ທ່ານຕ້ອງເວົ້າ ໃນເວລາໃດກໍຕາມທີ່ທ່ານຕ້ອງການ (see D&C 84:85).
- ນຳຂ່າວສານເຂົ້າສູ່ຈິດໃຈຂອງຜູ້ຄົນທີ່ທ່ານສອນ (ເບິ່ງ 2 ນີໄຟ 33:1).
- ເປັນພະຍານເຖິງຄວາມຈິງຂອງຂ່າວສານຂອງທ່ານ ແລະ ຢືນຢັນຄຳເວົ້າຂອງທ່ານ (see D&C 100:5–8).
- ຊ່ອຍໃຫ້ທ່ານເຫັນຄວາມຕ້ອງການຂອງຜູ້ຄົນທີ່ທ່ານກຳລັງສອນ (ເບິ່ງ ແອລະມາ 12:7).

ພະວິນຍານເປັນສິ່ງສຳຄັນສຳລັບການສອນຄວາມຈິງກ່ຽວກັບພະກິດຕິຄຸນ ໃນວິທີທີ່ສ້າງສັດທາໃນຄົນອື່ນໆ. ເມື່ອທ່ານພະຍາຍາມພັດທະນາສັດທາໃຫ້ອາໄສພະວິນຍານ, ທ່ານຄວນ:

- ອະທິຖານເພື່ອພະວິນຍານ (see D&C 42:14).
- ເຮັດໃຫ້ຈິດໃຈທ່ານບໍລິສຸດ (see D&C 112:28).
- ຮັກສາພະບັນຍັດ (see D&C 20:77, 79).
- ພະຍາຍາມສະສົມພະຄຳຂອງພະເຈົ້າ (see D&C 11:21; 84:85).
- ສອນເພື່ອວ່າຄົນອື່ນຈະເຂົ້າໃຈຂ່າວສານຂອງທ່ານ ແລະ ຮຽນຮູ້ຕາມນັ້ນ (see D&C 50:13–22).
- ໃຊ້ສັດທາ (ເບິ່ງ ໂມໂລໄນ 10:7).

ທ່ານໄດ້ຖືກແຕ່ງຕັ້ງສຳລັບການເອີ້ນທີ່ສັກສິດຂອງທ່ານກັບຄຳສັນຍາວ່າ ທ່ານຈະໄດ້ຮັບພະວິນຍານເມື່ອທ່ານໄດ້ເຮັດຕາມເງື່ອນໄຂທີ່ພະຜູ້ເປັນເຈົ້າຕັ້ງໄວ້. ການປາກົດຂອງປະທານແຫ່ງພະວິນຍານ ຄວນຈະເປັນຄວາມປາດຖະໜາທີ່ຈິງໃຈຂອງທ່ານ.

## ພະລັງ ແລະ ອຳນາດຂອງການເອີ້ນຂອງທ່ານ

ຜູ້ສອນສາດສະໜາທັງຫລາຍຕ້ອງໄປ ໃນອຳນາດຂອງຕຳແໜ່ງຊຶ່ງດ້ວຍອຳນາດທີ່ພວກເຂົາໄດ້ຮັບແຕ່ງຕັ້ງ ໂດຍປະກາດຂ່າວທີ່ເປັນຕາຊື່ນຊົມແຫ່ງຄວາມປິຕິຍິນດີອັນຍິ່ງໃຫຍ່ ແມ້ແຕ່ພະກິດຕິຄຸນອັນເປັນນິດ" (see D&C 79:1). ທ່ານມີອຳນາດທີ່ຈະສອນພະກິດຕິຄຸນ. ຖ້າທ່ານດຳລົງຖານະປະໂລຫິດ, ທ່ານມີອຳນາດທີ່ຈະ ປະກອບພິທີການຕ່າງໆຂອງຖານະປະໂລຫິດ. ເມື່ອທ່ານໃຊ້ອຳນາດນັ້ນດ້ວຍການອະທິຖານ ແລະ ມີຄ່າຄວນ, ທ່ານຈະໄດ້ຮັບພະລັງທາງວິນຍານ, ຊຶ່ງແມ່ນຫລັກຖານເຖິງຄວາມຈິງແທ້ຂອງການເອີ້ນຂອງທ່ານ. ບໍ່ຕ້ອງຢ້ານ ຫລື ອາຍກ່ຽວກັບການເຮັດໃຫ້ວຽກງານເຜີຍແຜ່ຂອງທ່ານປະສົບຜົນສຳເລັດ. ຄືກັນກັບພວກລູກຊາຍຂອງໂມໄຊຢາ, ທ່ານຕ້ອງສອນດ້ວຍພະລັງ ແລະ ອຳນາດຂອງພະເຈົ້າ (see Alma 17:2–3).

ຕອນທ່ານຖືກແຕ່ງຕັ້ງໂດຍອຳນາດຖານະປະໂລຫິດ, ທ່ານໄດ້ຮັບອຳເພີໃຈ ແລະ ສິດພິເສດທີ່ຈະເປັນຕົວແທນຂອງພະຜູ້ເປັນເຈົ້າ. ທ່ານໄດ້ຮັບໃບປະກາດໄຊຍະບັດສຳລັບການຮັບໃຊ້ທາງສາດສະໜາ ທີ່ຢືນຢັນຕໍ່ໂລກວ່າທ່ານ ມີອຳນາດນັ້ນ. ປະທານ ສະເປັນເຊີ ດັບເບິນຢູ ຄິມໂບ ໄດ້ກ່າວວ່າ: "ການແຕ່ງຕັ້ງເປັນສິ່ງຈິງຈັງ; ມັນເປັນການແຍກອອກຈາກບາບ, ແຍກອອກຈາກສິ່ງທາງການມະລົນ, ແຍກອອກຈາກທຸກຢ່າງທີ່ຫຍາບຄາຍ, ຕ່ຳຊ້າ, ໂຫດຮ້າຍ, ການປະພຶດທີ່ຕ່ຳ, ຫລື ບໍ່ສຸພາບ; ແຍກອອກຈາກໂລກສູ່ສະພາບທີ່ສູງກວ່າຂອງຄວາມຄິດ ແລະ ການກະທຳ. ການໄດ້ຮັບພອນມາຈາກການກະທຳທີ່ສັດຊື່ຂອງເຮົາ" (*The Teachings of Spencer W. Kimball*, ed. Edward L. Kimball [1982], 478).

ນອກເໜືອໄປຈາກອຳນາດຂອງທ່ານແລ້ວ ທ່ານຍັງມີໜ້າທີ່ຮັບຜິດຊອບທີ່ຈະດຳລົງຊີວິດໃຫ້ມີຄ່າຄວນຕາມການເອີ້ນຂອງທ່ານນຳອີກ. ໃນຖານະເປັນຕົວແທນຂອງພະຜູ້ເປັນເຈົ້າ, ທ່ານຕ້ອງເປັນ "ຕົວຢ່າງໃຫ້ຜູ້ເຊື່ອຖືທັງຫລາຍ" (1 ຕີໂມທີ 4:12). ຈົ່ງພະຍາຍາມດຳລົງຊີວິດຕາມພະບັນຍັດຂອງພະເຈົ້າ ແລະ ຮັກສາພັນທະສັນຍາທີ່ທ່ານ ເຮັດໄວ້ໃນພະວິຫານ; ຮູ້ພະຄຳພີ; ເປັນຄົນສຸພາບ, ຕົງເວລາ, ແລະ ເພິ່ງພາອາໄສໄດ້; ເຮັດຕາມມາດຕະຖານຂອງການປະຕິບັດຕົວ, ການນຸ່ງຖື, ແລະ ການຕົບແຕ່ງ; ຮັກຜູ້ຄົນທີ່ທ່ານຮັບໃຊ້ ແລະ ເຮັດວຽກນຳ. ໃຫ້ກຽດແກ່ພະນາມຂອງພະຄິດຜ່ານການກະທຳຂອງທ່ານ.

ນອກເໜືອໄປຈາກອຳນາດແລ້ວ, ທ່ານກໍຄວນໃຊ້ພະລັງໃນວຽກງານຂອງທ່ານນຳອີກ. ອຳນາດທີ່ທ່ານໄດ້ຮັບ ສາມາດນຳໄປສູ່ພະລັງໄດ້. ແທ້ຈິງແລ້ວ, ພະລັງທາງວິນຍານເປັນຫລັກຖານວ່າ ອຳນາດຂອງທ່ານແມ່ນຄວາມຈິງ. ພະລັງທາງວິນຍານເປັນຂອງປະທານທີ່ເຮັດໃຫ້ທ່ານສາມາດເຮັດວຽກງານຂອງທ່ານໄດ້ຜົນດີຫລາຍຂຶ້ນ.

ພະລັງ ແລະ ອຳນາດຂອງທ່ານຄວນຈະເປັນຫລັກຖານໃນຂະນະທີ່ທ່ານເຮັດວຽກງານ ແລະ ສອນ. ພະລັງອາດຈະສະແດງອອກໃນຫລາຍໆສິ່ງທີ່ທ່ານເຮັດ, ດັ່ງເຊັ່ນ:

- ເມື່ອທ່ານຮັບການນຳພາໂດຍພະວິນຍານເພື່ອຈະເວົ້າສິ່ງທີ່ພະເຈົ້າຢາກໃຫ້ທ່ານເວົ້າໃນເວລາທີ່ເໝາະສົມ (see D&C 84:85).
- ເມື່ອທ່ານຮັບການນຳພາກ່ຽວກັບບ່ອນທີ່ຈະໄປ ຫລື ຈະເຮັດແນວໃດ (see D&C 28:15; 31:11; 75:26–27).
- ເມື່ອພະວິນຍານຢືນຢັນປະຈັກພະຍານຂອງທ່ານ (ເບິ່ງ 2 ນີໄຟ 33:1; D&C 100:5–8).
- ເມື່ອທ່ານຮ່ວມໃນພິທີການຕ່າງໆແຫ່ງຄວາມລອດ (see D&C 84:19–20).
- ເມື່ອທ່ານໃຫ້ພອນຖານະປະໂລຫິດ ຖ້າວ່າທ່ານເປັນແອວເດີ (ເບິ່ງ ຢາໂກໂບ 5:14–15).
- ເມື່ອທ່ານອະທິຖານເພື່ອ ແລະ ອະທິຖານນຳຜູ້ຄົນທີ່ທ່ານເຮັດວຽກນຳ (see Alma 6:6; 8:18–22; 10:7–11; 31:26–35; D&C 75:19).
- ເມື່ອທ່ານສະແດງຄວາມຮັກຕໍ່ພະຜູ້ເປັນເຈົ້າ, ຄອບຄົວຂອງທ່ານ, ຜູ້ສອນສາດສະໜາຄົນອື່ນໆ, ແລະ ຜູ້ຄົນທີ່ທ່ານຮັບໃຊ້.

## ການສຶກສາພະຄຳພີ

**ທ່ານຈະໄດ້ຮັບພະລັງແນວໃດ?**

Alma 17:2–3 | D&C 53:3 | 1 ໂກລິນໂທ 2:4

## ກິດຈະກຳ: ການສຶກສາສ່ວນຕົວ ຫລື ກັບຄູ່ສອນສາດສະໜາ

ໃຫ້ເບິ່ງຮູບແຕ້ມທີ່ພະຄິດກຳລັງແຕ່ງຕັ້ງອັກຄະສາວົກ, ແລະ ຫລັງຈາກນັ້ນອ່ານ ໂຢຮັນ 15:1–16.

ພະຄິດເປັນເຄືອອະງຸ່ນໃນວິທີໃດ? ທ່ານເປັນກິ່ງງ່າຂອງເຄືອອະງຸ່ນນັ້ນແນວໃດ? ການແຕ່ງຕັ້ງຂອງທ່ານກ່ຽວຂ້ອງກັບຄວາມສຳພັນນີ້ແນວໃດ?

---

ໃຫ້ອ່ານ ໃບປະກາດໄຊຍະບັດສຳລັບການຮັບໃຊ້ທາງສາດສະໜາຂອງທ່ານອີກ. ບັນທຶກຄວາມຮູ້ສຶກ ແລະ ຄວາມຄິດຂອງທ່ານກ່ຽວກັບສິ່ງທີ່ທ່ານໄດ້ອ່ານ. ແຕ່ລະຄັ້ງທີ່ທ່ານສຶກສາບົດຮຽນນີ້, ໃຫ້ທົບທວນຂັ້ນຕອນນີ້ຄືນອີກ. ໃຫ້ບັນທຶກຄວາມຮູ້ສຶກຂອງທ່ານປ່ຽນແປງຕາມເວລາແນວໃດ.

---

ໃຫ້ສຶກສາ Doctrine and Covenants 109:13–15, 21–30, 38–39, 55–57, ເຊິ່ງເປັນບົດສັ້ນຈາກຄຳ ອະທິຖານທີ່ໄດ້ຮັບດົນໃຈສຳລັບການອຸທິດພະວິຫານ ເຄີດແລນ ຂອງສາດສະດາ ໂຢເຊັບ ສະມິດ. ໂຢເຊັບ ສະມິດ ໄດ້ທູນຂໍພອນແນວໃດສຳລັບຜູ້ທີ່ສັດຊື່.



ໝາຍເຫດ

ໝາຍເຫດ

## ພະກິດຕິຄຸນຂອງພະເຢຊູຄຣິດ

ພະກິດຕິຄຸນຂອງພະເຢຊູຄຣິດກຳນົດຄວາມໝາຍຂອງຂ່າວສານ ແລະ ເປົ້າໝາຍຂອງທ່ານ; ໝາຍຄວາມວ່າ ພະກິດຕິຄຸນອະທິບາຍເຖິງວຽກງານຂອງຜູ້ສອນສາດສະໜາວ່າ "ແມ່ນຫຍັງ" ແລະ "ເປັນຫຍັງ" ຈຶ່ງເຮັດວຽກງານຂອງຜູ້ສອນສາດສະໜາ. ພະຜູ້ຊ່ອຍໃຫ້ລອດໄດ້ກຳນົດຄວາມໝາຍເຖິງພະກິດຕິຄຸນຂອງພະອົງ ໃຫ້ຮ່ວມດ້ວຍຫລັກທຳທີ່ສຳຄັນ ແລະ ງ່າຍ. ພະອົງໄດ້ມາສູ່ໂລກເພື່ອເຮັດຕາມຄວາມປາດຖະໜາຂອງພະບິດາຂອງພະອົງ ແລະ ພະບິດາຂອງພະອົງໄດ້ສົ່ງພະອົງມາສູ່ໂລກ ເພື່ອຈະຖືກຍົກຂຶ້ນເທິງໄມ້ກາງແຂນ. ໂດຍການຊົດໃຊ້ ແລະ ການຄືນມາຈາກຕາຍຂອງພະອົງ ມະນຸດທຸກຄົນຈະໄດ້ຖືກຍົກຂຶ້ນຢູ່ຕໍ່ພະພັກຂອງພະຄຣິດ ເພື່ອການພິພາກສາຕາມວຽກງານຂອງເຂົາ ບໍ່ວ່າເຂົາຈະດີ ຫລື ຊົ່ວ. ຜູ້ທີ່ໃຊ້ສັດທາໃນພະຄຣິດ, ກັບໃຈຈາກບາບຂອງຕົນ ແລະ ຮັບບັບຕິດສະມາໃນພະນາມຂອງພະຄຣິດ ຈະສາມາດຖືກຊຳລະໃຫ້ສະອາດໄດ້ ໂດຍພະວິນຍານບໍລິສຸດ. ຖ້າເຂົາເຈົ້າອົດທົນຈົນເຖິງທີ່ສຸດ, ເຂົາເຈົ້າຈະຢືນຢ່າງບໍລິສຸດຢູ່ຕໍ່ພະພັກພະຄຣິດໃນວັນສຸດທ້າຍ ແລະ ຈະເຂົ້າໄປສູ່ທີ່ປະທັບຂອງພະຜູ້ເປັນເຈົ້າ. ພະຄຣິດຈະຖືວ່າ ເຂົາບໍ່ມີຄວາມຜິດຢູ່ຕໍ່ພະພັກຂອງພະບິດາ. ພະອົງຈະເປັນຜູ້ກາງ ແລະ ຜູ້ວິງວອນແທນເຂົາເຈົ້າ. ຜູ້ທີ່ບໍ່ອົດທົນໃນຄວາມສັດຊື່ຈົນເຖິງທີ່ສຸດຈະ "ຖືກໂຍນເຂົ້າໃນໄຟ . . . ເພາະຄວາມຍຸຕິທຳຂອງພະບິດາ." (ເບິ່ງ 3 ນີໄຟ 27:13–22; ປຽບທຽບກັບ 2 ນີໄຟ 31:10–21; 3 ນີໄຟ 11:31–41; D&C 76:40–42, 50–53.)

ເປົ້າໝາຍຂອງພະກິດຕິຄຸນແມ່ນເພື່ອຊຳລະຜູ້ຄົນຈາກບາບຂອງເຂົາເຈົ້າ ເພື່ອເຂົາເຈົ້າຈະສາມາດຮັບເອົາຄວາມເມດຕາຂອງພະຜູ້ຊ່ອຍໃຫ້ລອດໃນວັນພິພາກສາ. ເພາະສະນັ້ນ, ຈຸດສຳຄັນຂອງປຶ້ມນີ້ ແລະ, ສຳຄັນກວ່ານັ້ນ ວຽກງານທີ່ທ່ານເຮັດແຕ່ລະມື້ ແມ່ນເພື່ອ ເຊື້ອເຊີນຄົນອື່ນໆໃຫ້ມາສູ່ພະຄຣິດໂດຍຊ່ອຍເຫລືອເຂົາເຈົ້າໃຫ້ໄດ້ຮັບ ພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ຜ່ານການມີສັດທາໃນພະເຢຊູຄຣິດ ແລະ ການຊົດໃຊ້ຂອງພະອົງ, ການກັບໃຈ, ການຮັບບັບຕິດສະມາ, ແລະ ການຮັບເອົາຂອງປະທານແຫ່ງພະວິນຍານບໍລິສຸດ, ແລະ ການອົດທົນຈົນເຖິງທີ່ສຸດ.

ບຸກຄົນ ແລະ ຄອບຄົວເລີ່ມເຮັດຕາມພະຄຣິດເມື່ອເຂົາເຈົ້າໃຊ້ສັດທາໃນພະອົງ ແລະ ກັບໃຈຈາກບາບຂອງເຂົາເຈົ້າ. ເຂົາເຈົ້າໄດ້ຮັບການປົດບາບຜ່ານການຮັບບັບຕິດສະມາ ແລະ ໂດຍການຮັບເອົາຂອງປະທານແຫ່ງພະວິນຍານບໍລິສຸດ ຈາກຜູ້ທີ່ມີອຳນາດທີ່ພະເຈົ້າມອບໃຫ້ເພື່ອປະກອບພິທີການເຫລົ່ານີ້. ແລ້ວເຂົາເຈົ້າອົດທົນຈົນເຖິງທີ່ສຸດ, ຫລື ອີກປະການໜຶ່ງ, ເຂົາເຈົ້າໃຊ້ສັດທາໃນພະເຢຊູຄຣິດຕະຫລອດຊີວິດຂອງເຂົາເຂົ້າຕໍ່ໄປ, ກັບໃຈ, ແລະ ຕໍ່ພັນທະສັນຍາທີ່ເຂົາເຈົ້າໄດ້ເຮັດ. ສິ່ງເຫລົ່ານີ້ບໍ່ແມ່ນຫລັກທຳທີ່ເຂົາເຈົ້າຈະປະສົບການພຽງຄັ້ງດຽວເທົ່ານັ້ນ ໃນຊີວິດ; ແທ້ໆແລ້ວ ເມື່ອເຮັດແບບນີ້ຄືນແລ້ວຄືນອີກຕະຫລອດຊີວິດຂອງເຂົາເຈົ້າ ຫລັກທຳເຫລົ່ານີ້ຈະເພີ່ມແບບແຜນລາງວັນຂອງການດຳລົງຊີວິດໃຫ້ເຂົາເຈົ້າ. ແທ້ຈິງແລ້ວ, ເປັນວິທີດຽວເທົ່ານັ້ນຂອງການດຳລົງຊີວິດທີ່ຈະນຳຄວາມສະຫງົບມາສູ່ຄວາມສຳນຶກ ແລະ ເຮັດໃຫ້ລູກໆຂອງພະບິດາເທິງສະຫວັນສາມາດກັບຄືນໄປສູ່ທີ່ປະທັບຂອງພະອົງໄດ້.

> *"ສອນຫລັກທຳທຳອິດແຫ່ງພະກິດຕິຄຸນ—ສອນຫລັກທຳເຫລົ່ານີ້ຄືນອີກ: ທ່ານຈະເຫັນວ່າ ແຕ່ລະມື້ແນວຄິດອັນໃໝ່ ແລະ ຄວາມເຂົ້າໃຈຂອງທ່ານ ຈະເພີ່ມຫລາຍຂຶ້ນກ່ຽວກັບຫລັກທຳເຫລົ່ານັ້ນຈະຖືກເປີດເຜີຍແກ່ທ່ານ. ທ່ານສາມາດເພີ່ມຄວາມເຂົ້າໃຈກ່ຽວກັບຫລັກທຳເຫລົ່ານັ້ນຢ່າງແຈ່ມແຈ້ງຫລາຍຂຶ້ນ. ຫລັງຈາກນັ້ນທ່ານຈະສາມາດເຮັດໃຫ້ຫລັກທຳເຫລົ່ານັ້ນເຂົ້າໃຈໄດ້ງ່າຍສຳລັບຄົນທີ່ທ່ານສອນ."*
>
> — ໂຈເຊັບ ສະມິດ
>
> *HISTORY OF THE CHURCH,* 6:323

ການເຊື່ອຟັງຕໍ່ພະເຢຊູຄຣິດແມ່ນຄຳໝັ້ນສັນຍາຊົ່ວຊີວິດ. ຜ່ານການໃຊ້ສັດທາ, ກັບໃຈ, ຮັບບັບຕິດສະມາ ແລະ ເຮັດຄຳໝັ້ນສັນຍາທີ່ຈະຮັບໃຊ້ພະຄຣິດ, ແລະ ແລ້ວຮັບເອົາພະວິນຍານບໍລິສຸດ, ເຮົາຈະສາມາດປະສົບກັບການປິ່ນປົວທາງວິນຍານ, ຮັບການໃຫ້ອະໄພຈາກບາບ ແລະ ການປ່ຽນໃຈເຫລື້ອມໃສທັງໝົດຕໍ່ພະຜູ້ຊ່ອຍໃຫ້ຫລອດ ແລະ ພະກິດຕິຄຸນຂອງພະອົງ.

ຈົ່ງຊ່ອຍຜູ້ຄົນໃຫ້ໄດ້ຮັບສັດທາໃນພະເຢຊູຄຣິດຈົນເຖິງການກັບໃຈ ໂດຍການສອນ ແລະ ສະແດງປະຈັກພະຍານວ່າຄວາມສົມບູນຂອງພະກິດຕິຄຸນຂອງພະເຢຊູຄຣິດ ແລະ ອຳນາດຖານະປະໂລຫິດ ໄດ້ຖືກຟື້ນຟູຄືນມາໃໝ່ແລ້ວ ແລະ ໂດຍການເຊື້ອເຊີນເຂົາເຈົ້າໃຫ້ດຳລົງຊີວິດຕາມຄຳສອນຂອງພະອົງ.

ໝາຍເຫດ

**ການສຶກສາພະຄຳພີ**

**ພະກິດຕິຄຸນ ຫລື ຄຳສອນຂອງພະຄິດ ແມ່ນຫຍັງ?**

2 ນີໄຟ 31:10–21 | 3 ນີໄຟ 11:31–41 | 3 ນີໄຟ 27:13–22

## ຂ່າວສານຂອງການຟື້ນຟູ: ພື້ນຖານຂອງສັດທາ

ບໍ່ວ່າທ່ານຈະຮັບໃຊ້ຢູ່ໃສ ຫລື ສອນຜູ້ໃດ, ໃຫ້ການຟື້ນຟູພະກິດຕິຄຸນຂອງພະເຢຊູຄິດເປັນຈຸດກາງການສອນຂອງທ່ານ. “ພະຜູ້ເປັນເຈົ້າຈະໃຫ້ພອນທ່ານເມື່ອທ່ານສອນຂ່າວສານຂອງການຟື້ນຟູຕໍ່ຊາວໂລກທີ່ຕ້ອງການ ພະກິດຕິຄຸນຂອງພະເຢຊູຄິດຫລາຍທີ່ສຸດ” (“Statement on Missionary Work,” First Presidency letter, 11 Dec. 2002). ເມື່ອທ່ານສຶກສາຄຳສອນໃນບົດຮຽນຂອງຜູ້ສອນສາດສະໜາ, ທ່ານຈະຮູ້ວ່າເຮົາມີຂ່າວສານ ອັນໜຶ່ງ ທີ່ວ່າ: ຜ່ານສາດສະດາໃນປະຈຸບັນ, ພະເຈົ້າໄດ້ຟື້ນຟູຄວາມຮູ້ກ່ຽວກັບແຜນແຫ່ງຄວາມລອດ, ເຊິ່ງເປັນສູນກາງຂອງການຊົດໃຊ້ຂອງພະຄິດ ແລະ ປະສົບຜົນສຳເລັດໂດຍດຳລົງຊີວິດຕາມຫລັກທຳເບື້ອງຕົ້ນ ແລະ ພິທີການຂອງພະກິດຕິຄຸນ.

ໃຫ້ໝັ້ນໃຈວ່າທຸກໆຄົນທີ່ທ່ານສອນເຂົ້າໃຈຄຳສອນດັ່ງຕໍ່ໄປນີ້ຢ່າງແຈ່ມແຈ້ງ:

- ພະເຈົ້າເປັນພະບິດາຜູ້ສະຖິດໃນສະຫວັນທີ່ແທ້ຈິງຂອງເຮົາ. ພະອົງຮັກເຮົາ. ທຸກຄົນໃນແຜ່ນດິນໂລກເປັນລູກຂອງພະເຈົ້າ ແລະ ເປັນສະມາຊິກໃນຄອບຄົວຂອງພະເຈົ້າ. ພະເຢຊູຄິດ, ພະບຸດຂອງພະເຈົ້າ, ເປັນພະຜູ້ຊ່ອຍໃຫ້ລອດ ແລະ ພະຜູ້ໄຖ່ຂອງເຮົາ.
- ພະບິດາເທິງສະຫວັນທີ່ຮັກຂອງເຮົາໄດ້ຕິດຕໍ່ກັບລູກໆພະອົງໃນປະຫວັດພະຄຳພີໄບເບິນ ໂດຍການເປີດເຜີຍພະກິດຕິຄຸນຂອງພະອົງແກ່ສາດສະດາທັງຫລາຍ. ແຕ່ເປັນຕາເສົ້າໃຈ, ຫລາຍຄົນໄດ້ປະຕິເສດ ພະກິດຕິຄຸນນັ້ນ; ແມ້ແຕ່ຄົນບາງຄົນທີ່ຍອມຮັບ ໄດ້ປ່ຽນແປງຄຳສອນຂອງພະກິດຕິຄຸນ ແລະ ພິທີການ ແລະ ຕົກຢູ່ໃນຄວາມບໍ່ເຊື່ອ ແລະ ການປະຖິ້ມຄວາມເຊື່ອ.
- ພະບິດາເທິງສະຫວັນຂອງເຮົາໄດ້ສົ່ງພະບຸດຂອງພະອົງ, ພະເຢຊູຄິດ, ມາໃນໂລກ. ພະອົງໄດ້ເຮັດ ສິ່ງມະຫັດສະຈັນ ແລະ ໄດ້ສອນພະກິດຕິຄຸນຂອງພະອົງ. ພະອົງໄດ້ເຮັດການຊົດໃຊ້ໃຫ້ສຳເລັດ ແລະ ໄດ້ເປັນຄືນມາຈາກຕາຍ.
- ເລີ່ມຕົ້ນດ້ວຍພາບທີ່ມາໃຫ້ເຫັນຄັ້ງທຳອິດ, ພະເຈົ້າໄດ້ຕິດຕໍ່ກັບລູກໆຂອງພະອົງດ້ວຍຄວາມຮັກອີກຄັ້ງ ໜຶ່ງ. ພະອົງໄດ້ຟື້ນຟູພະກິດຕິຄຸນຂອງພະເຢຊູຄິດ ແລະ ອຳນາດຖານະປະໂລຫິດຂອງພະອົງ ແລະ ໄດ້ສ້າງຕັ້ງສາດສະໜາຈັກຂອງພະອົງຂຶ້ນຢູ່ໃນໂລກ ຜ່ານສາດສະດາ ໂຢເຊັບ ສະມິດ. ພະຄຳພີມໍມອນເປັນຫລັກຖານທີ່ເປັນຕາເຊື່ອຂອງການຟື້ນຟູນີ້.



ເມື່ອທ່ານຊ່ອຍເຫລືອຜູ້ສົນໃຈໃຫ້ເຫັນແບບແຜນຂອງການປະຖິ້ມຄວາມເຊື່ອ ແລະ ການຟື້ນຟູ, ເຂົາເຈົ້າຈະຕຽມ ພ້ອມເພື່ອເຂົ້າໃຈເຖິງຄວາມຕ້ອງການອັນຍິ່ງໃຫຍ່ໃນການຟື້ນຟູຂອງຍຸກສຸດທ້າຍ. ເຂົາເຈົ້າຈະເຫັນເຖິງຄວາມຕ້ອງການ ທີ່ຕ້ອງຍອມຮັບພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່, ຮັບພິທີການແຫ່ງຄວາມລອດໂດຍອຳນາດທີ່ໄດ້ຖືກຟື້ນຟູຂອງຖານະປະໂລຫິດ, ແລະ ເຮັດຕາມວິທີທີ່ຈະໄປສູ່ຊີວິດນິລັນດອນ. ຊ່ອຍໃຫ້ຜູ້ຄົນເຂົ້າໃຈວ່າສາດສະໜາຈັກບໍ່ແມ່ນພຽງແຕ່ເປັນສາດສະໜາໜຶ່ງອີກ, ຫລື ພຽງແຕ່ເປັນສາດສະໜາຈັກຂອງຄົນອາເມລິກາເທົ່ານັ້ນ. ແທ້ຈິງແລ້ວ, ສາດສະໜາຈັກເປັນການຟື້ນຟູຂອງ “ຄວາມສົມບູນຂອງພະກິດຕິຄຸນ” (see D&C 1:23), ຄືກັນກັບທີ່ໄດ້ຖືກເປີດເຜີຍ ແລະ ຖືກສອນຕັ້ງແຕ່ຕອນເລີ່ມຕົ້ນ.

ພະຄຳພີມໍມອນ: ປະຈັກພະຍານອີກຢ່າງໜຶ່ງເຖິງພະເຢຊູຄິດເປັນຫລັກຖານທີ່ເປັນຕາເຊື່ອວ່າ ໂຢເຊັບ ສະມິດ ເປັນສາດສະດາ ແລະ ວ່າພະກິດຕິຄຸນຂອງພະເຢຊູຄິດໄດ້ຖືກຟື້ນຟູຄືນມາໃໝ່. ພະຄຳພີນີ້ເປັນຫລັກສຳຄັນຂອງສາດສະໜາຂອງເຮົາ, ເປັນແຫລ່ງທີ່ມີອຳນາດທີ່ສຸດໃນການສອນຂ່າວສານນີ້. ຄວາມຈິງ

ໝາຍເຫດ

ອັນສຳຄັນບາງຢ່າງ ໄດ້ຖືກຟື້ນຟູຄືນມາໃໝ່ຜ່ານ ໂຈເຊັບ ສະມິດ ຮ່ວມດ້ວຍຄວາມຮູ້ທີ່ວ່າພະເຈົ້າເປັນອົງພະບິດາຂອງເຮົາ ແລະ ເຮົາເປັນລູກທາງວິນຍານຂອງພະອົງ, ວ່າເຮົາໄດ້ອາໄສຢູ່ນຳພະອົງກ່ອນມາເກີດ, ແລະ ວ່າຄອບຄົວສາມາດຢູ່ຮ່ວມກັນຕະຫລອດໄປໃນທີ່ປະທັບຂອງພະເຈົ້າຜ່ານການຊົດໃຊ້ຂອງພະຄຣິດ ໂດຍການເຊື່ອຟັງກົດ ແລະ ພິທີການຕ່າງໆແຫ່ງພະກິດຕິຄຸນ.

ພະຄຳພີມໍມອນເປັນຫລັກຖານຂອງຄວາມຮັກຂອງພະເຈົ້າທີ່ມີຕໍ່ລູກໆຂອງພະອົງ. ພະຄຳພີນີ້ສະແດງໃຫ້ເຫັນວ່າພະເຈົ້າກ່າວນຳລູກໆຂອງພະອົງ. ເມື່ອທ່ານສອນ ແລະ ສະແດງປະຈັກພະຍານ, ຈົ່ງເຊື້ອເຊີນຜູ້ຄົນໃຫ້ອ່ານພະຄຳພີມໍມອນ ແລະ ອະທິຖານກ່ຽວກັບຂ່າວສານຂອງມັນ. ແຕ່ລະຄົນທີ່ທ່ານສອນຕ້ອງຕັດສິນໃຈວ່າຈະຍອມຮັບພະຄຳພີມໍມອນເປັນການເປີດເຜີຍຈາກພະເຈົ້າຫລືບໍ່.

ຈົ່ງໄວ້ວາງໃຈຄຳສັນຍາທີ່ດີເລີດໃນ ໂມໂຣໄນ 10:3–5. ເຮັດທຸກສິ່ງທີ່ທ່ານສາມາດເຮັດໄດ້ ເພື່ອຊັກຊວນໃຫ້ ຜູ້ຄົນອ່ານພະຄຳພີມໍມອນ, ເຂົ້າໃຈມັນ, ແລະ ທູນຖາມພະເຈົ້າດ້ວຍຄວາມຈິງໃຈວ່າ ພະຄຳພີນີ້ແມ່ນຄວາມຈິງຫລືບໍ່. ພະຍານຂອງພະວິນຍານບໍລິສຸດເປັນຫລັກສຳຄັນຂອງສັດທາຂອງເຂົາເຈົ້າວ່າ ພະຄຣິດໄດ້ຟື້ນຟູສາດສະໜາຈັກຂອງພະອົງຄືນມາໃໝ່. ຊ່ອຍຄົນທີ່ທ່ານສອນໃຫ້ໄດ້ຮັບການຢືນຢັນທາງວິນຍານນັ້ນ.

### ການສຶກສາພະຄຳພີ

**ທ່ານຈະໃຊ້ພະຄຳພີມໍມອນວິທີໃດໃນວຽກງານເຜີຍແຜ່ຂອງທ່ານ?**

| | | |
|---|---|---|
| 1 Nephi 13:39 | ໂມໂຣໄນ 10:3–5 | D&C 42:12–14 |
| 2 ນີໄຟ 29:8–10 | D&C 20:5–16 | |

### ກິດຈະກຳ: ການສຶກສາສ່ວນຕົວ

ໃຫ້ວາດພາບເບິ່ງວ່າທ່ານຈະຂຽນຂໍ້ຄວາມກ່ຽວກັບຂ່າວສານຂອງການຟື້ນຟູສຳລັບໜັງສືພິມຂອງທ້ອງຖິ່ນ. ໃນປຶ້ມບັນທຶກການສຶກສາຂອງທ່ານ ໃຫ້ຂຽນຫົວຂໍ້ເລື່ອງທີ່ບັນລະຍາຍເຖິງຈຸດກາງຂອງຂ່າວສານ. ຫລັງຈາກນັ້ນໃຫ້ບັນທຶກຄວາມຄິດ ແລະ ຄວາມຮູ້ສຶກຂອງທ່ານກ່ຽວກັບຂ່າວສານນີ້, ຮ່ວມດ້ວຍການເຂົ້າໃຈການຟື້ນຟູດີຂຶ້ນໄດ້ປ່ຽນແປງການດຳລົງຊີວິດຂອງທ່ານ ແລະ ຄວາມຄິດກ່ຽວກັບໂລກທີ່ອ້ອມຂ້າງທ່ານແນວໃດ.

## ການຊ່ອຍຄົນອື່ນໆໃຫ້ເຮັດຄຳໝັ້ນສັນຍາ: ເປັນຫົນທາງທີ່ນຳສູ່ສັດທາ ແລະ ການກັບໃຈ

ຊ່ອຍຜູ້ຄົນໃຫ້ເໝາະສົມທີ່ຈະຮັບບັບຕິສະມາ ແລະ ຮັບການຢືນຢັນໂດຍການສອນເຂົາເຈົ້າຄຳສອນທີ່ແທ້ຈິງ ແລະ ເຊື້ອເຊີນເຂົາເຈົ້າໃຫ້ກັບໃຈ ແລະ ປ່ຽນແປງຊີວິດຂອງເຂົາເຈົ້າຜ່ານການເຮັດ ແລະ ການຮັກສາຄຳໝັ້ນສັນຍາຕ່າງໆທີ່ສ້າງສັດທາໃນພະເຢຊູຄຣິດ. ຄຳໝັ້ນສັນຍາເຫລົ່ານີ້ຕຽມຜູ້ຄົນໃຫ້ເຮັດ ແລະ ຮັກສາພັນທະສັນຍາທີ່ສັກສິດ.

ແອວເດີ ເຈຟະລີ ອາ ຮໍແລນ ໄດ້ສອນວ່າ: "ສິ່ງທຳອິດທີ່ທ່ານຈະເຮັດແມ່ນ ມີຄວາມຮູ້ສຶກທີ່ຜິດຫວັງເມື່ອຜູ້ສົນໃຈບອກທ່ານວ່າເຂົາເຈົ້າຍັງບໍ່ໄດ້ອ່ານ ແລະ ອະທິຖານກ່ຽວກັບພະຄຳພີມໍມອນເທື່ອ. ສ່ວນຫລາຍເຮົາຈະບໍ່ສົນໃຈກ່ຽວກັບເລື່ອງນີ້. ນີ້ແມ່ນຊີວິດນິລັນດອນ. ນີ້ແມ່ນຄວາມລອດຂອງລູກໆຂອງພະເຈົ້າ. ອານາຄົດນິລັນດອນຂອງຜູ້ສົນໃຈຂຶ້ນກັບສິ່ງທີ່ເຂົາເຈົ້າເລືອກເຮັດ. . . . ມັນແມ່ນເສັ້ນທາງທີ່ສຳຄັນທີ່ສຸດທີ່ຜູ້ສົນໃຈຄົນນີ້ຈະເລືອກເດີນ. ແຕ່ວ່າຖ້າເຂົາເຈົ້າບໍ່ຮູ້ສິ່ງນັ້ນ, ຢ່າງໜ້ອຍທີ່ສຸດແມ່ນທ່ານຮູ້! . . . ດັ່ງນັ້ນຈົ່ງເປັນຜູ້ຄວບຄຸມສະຖານະການນີ້. ຈົ່ງສອນດ້ວຍພະລັງ ແລະ ອຳນາດ ແລະ ຫລັງຈາກນັ້ນໃຫ້ຮູ້ສຶກຜິດຫວັງຖ້າວ່າບາດກ້າວທຳອິດເຊິ່ງນຳສູ່ການຮັກສາພະບັນຍັດ ແລະ ການຮັກສາພັນທະສັນຍາຂັ້ນເລີ່ມຕົ້ນບໍ່ໄດ້ຮັບຜົນສຳເລັດ" ("Making and Keeping Covenants," missionary satellite broadcast, Apr. 1997).

ເມື່ອທ່ານສອນຜູ້ຄົນໃຫ້ເຂົ້າໃຈເຖິງການຟື້ນຟູທີ່ສົມບູນຂອງພະກິດຕິຄຸນ, ທ່ານໄດ້ "ປະກາດເລື່ອງການກັບໃຈ" (see D&C 15:6). ການກັບໃຈພົວພັນເຖິງການປ່ຽນແປງຂອງຈິດໃຈ ແລະ ຄວາມປາດຖະໜາທີ່ຈະປະຖິ້ມບາບ ແລ້ວຮັບໃຊ້ພະເຈົ້າ. ມັນພົວພັນເຖິງການຮ້ອງຂໍຕໍ່ພະວິນຍານ ແລະ ການເຮັດຕາມຄວາມປາດຖະໜາຂອງພະເຈົ້າ. ຜູ້ຄົນຕ້ອງຮັກສາຄຳໝັ້ນສັນຍາຂອງເຂົາເຈົ້າຫລາຍຂຶ້ນກວ່າເກົ່າ ເພື່ອດຳລົງຊີວິດທີ່ສອດຄ່ອງກັບຄວາມປາດຖະໜາຂອງພະເຈົ້າ. ການກັບໃຈຕ້ອງເປັນການປ່ຽນແປງທີ່ຈິງໃຈ ແລະ ຂອງຄວາມຄິດ, ຄວາມຢາກ, ຄວາມເຄີຍຊິນ ແລະ ການກະທຳ. ມັນເປັນປະສົບການທີ່ດີເຊິ່ງນຳຄວາມປິຕິຍິນດີ ແລະ ຄວາມສະຫງົບມາໃຫ້. ໃຫ້ກ້າຫານ ແລະ ຊ່ອຍເຫລືອຜູ້ຄົນດ້ວຍຄວາມຮັກ ເພື່ອໃຫ້ເຂົ້າໃຈ

ໝາຍເຫດ

ສິ່ງທີ່ເຂົາເຈົ້າຕ້ອງເຮັດເພື່ອຈະກັບໃຈ. ໂດຍການເຊື້ອເຊີນໃຫ້ຜູ້ຄົນເຮັດຄຳໝັ້ນສັນຍາ, ທ່ານສາມາດບອກເຖິງການເຕືອນ ແລະ ນຳຄວາມຫວັງມາສູ່ເຂົາເຈົ້ານຳອີກ.

**ການສຶກສາພະຄຳພີ**

**ຂໍ້ພະຄຳພີເຫລົ່ານີ້ໄດ້ສອນຫຍັງແດ່ກ່ຽວກັບການປະກາດເລື່ອງການກັບໃຈ?**

| | | |
|---|---|---|
| Alma 29:1–4 | Alma 62:45 | D&C 15:6; 16:6 |
| ແອລະມາ 42:31 | D&C 14:8 | |

## ການຮັບບັບຕິດສະມາ ແລະ ການຢືນຢັນ

ການຮັບບັບຕິດສະມາ ແລະ ການຢືນຢັນຜູ້ຄົນທີ່ທ່ານສອນແມ່ນຈຸດກາງຂອງເປົ້າໝາຍຂອງທ່ານ. ການຮັບ ບັບຕິດສະມາແມ່ນເພື່ອຮັບການປົດບາບ, ແລະ ຂອງປະທານແຫ່ງພະວິນຍານບໍລິສຸດນຳພອນທັງຫລາຍ ມາສູ່ຜູ້ທີ່ດຳລົງຊີວິດຢ່າງມີຄ່າຄວນສຳລັບພອນເຫລົ່ານັ້ນ. ຜ່ານພິທີການເຫລົ່ານີ້ ຜູ້ຄົນໄດ້ເຂົ້າສູ່ປະຕູຮົ້ວ ແລະ ກ້າວ ເດີນຕາມເສັ້ນທາງສູ່ຊີວິດນິລັນດອນຕໍ່ໄປ. ແອວເດີ ດາລິນ ເອັດ ໂອກ ໄດ້ກ່າວວ່າ: "ເຮົາເທດສະໜາ ແລະ ສອນ ບໍ່ແມ່ນເພື່ອຈະ 'ນຳຜູ້ຄົນມາສູ່ສາດສະໜາຈັກເທົ່ານັ້ນ' ຫລື ເພື່ອເຮັດໃຫ້ມີຈຳນວນຂອງສະມາຊິກຂອງສາດສະໜາຈັກເພີ່ມຂຶ້ນ. ເຮົາເທດສະໜາ ແລະ ສອນ ບໍ່ແມ່ນເພື່ອຈະຊັກຊວນຜູ້ຄົນໃຫ້ດຳລົງຊີວິດທີ່ດີຂຶ້ນເທົ່ານັ້ນ. . . . ເຮົາເຊື້ອເຊີນຜູ້ຄົນທັງໝົດ ເຂົ້າມາສູ່ພະຄຣິດໂດຍການກັບໃຈ ແລະ ຮັບບັບຕິດສະມາ ແລະ ຮັບການຢືນຢັນເພື່ອຈະເປີດປະຕູສູ່ອານາຈັກຊັ້ນສູງໃຫ້ລູກຊາຍ ແລະ ລູກສາວທັງຫລາຍຂອງພະເຈົ້າ. ບໍ່ມີຜູ້ໃດອີກແລ້ວສາມາດເຮັດໄດ້" ("The Purpose of Missionary Work," missionary satellite broadcast, Apr. 1995).

ເມື່ອທ່ານສອນພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່, ຈົ່ງຊ່ອຍຜູ້ຄົນໃຫ້ເຂົ້າໃຈລັກສະນະອັນສັກສິດຂອງການຮັບບັບຕິດສະມາ ແລະ ການຢືນຢັນ. ຊ່ອຍເຂົາເຈົ້າໃຫ້ຮູ້ຈັກວ່າການໄດ້ຮັບຂອງປະທານແຫ່ງພະວິນຍານບໍລິສຸດ ເປັນພອນທີ່ຍິ່ງໃຫຍ່ໃນຊີວິດນີ້ ແລະ ເປັນກະແຈສູ່ຄວາມລອດຂອງເຂົາເຈົ້າ. ພະວິນຍານບໍລິສຸດຈະ "ສອນ [ເຂົາເຈົ້າ] ທຸກສິ່ງ" (ໂຢຮັນ 14:26). ປະທານ ບອຍເຄ ແພັກເກີ ໄດ້ສອນວ່າ: "ເມື່ອທ່ານສອນຜູ້ສົນໃຈ ແລະ ຕຽມເຂົາເຈົ້າເພື່ອຮັບບັບຕິດສະມາດ້ວຍນ້ຳ, ທ່ານຕ້ອງຄິດເຖິງຂອງປະທານແຫ່ງພະວິນຍານບໍລິສຸດນຳອີກ—ເຊິ່ງແມ່ນການຮັບບັບຕິດສະມາດ້ວຍໄຟ. ຈົ່ງຄິດເຖິງເລື່ອງນີ້ວ່າເປັນປະໂຫຍກອັນດຽວ. ທຳອິດແມ່ນການຮັບບັບຕິດສະມາດ້ວຍນ້ຳ ແລະ ຫລັງຈາກນັ້ນແມ່ນການຮັບບັບຕິດສະມາດ້ວຍໄຟ" ("The Gift of the Holy Ghost: What Every Missionary Should Know—and Every Member As Well," seminar for new mission presidents, June 2003). ສາດສະດາ ໂຢເຊັບ ສະມິດ ໄດ້ສອນວ່າ, "ການຮັບບັບຕິດສະມາດ້ວຍນ້ຳແມ່ນສຳເລັດພຽງແຕ່ເຄິ່ງດຽວເທົ່ານັ້ນ, ແລະ ບໍ່ມີຜົນດີຫຍັງໝົດຖ້າປາດສະຈາກອີກເຄິ່ງໜຶ່ງ— ເຊິ່ງແມ່ນການຮັບບັບຕິດສະມາຈາກພະວິນຍານບໍລິສຸດ (*History of the Church*, 5:499).

ຈົ່ງຊ່ອຍຜູ້ສົນໃຈທີ່ທ່ານສອນໃຫ້ເຂົ້າໃຈວ່າ ກ່ອນຈະເໝາະສົມຕໍ່ການຮັບບັບຕິດສະມາ ແລະ ການຢືນຢັນໄດ້ນັ້ນ ເຂົາເຈົ້າຕ້ອງເຮັດຕາມເງື່ອນໄຂທີ່ມີໃນ Doctrine and Covenants 20:37 ເສຍກ່ອນ.

**D&C 20:37 ຄວາມເໝາະສົມສຳລັບການຮັບບັບຕິດສະມາ**

- ຖ່ອມຕົວເຂົາເຈົ້າຕໍ່ໜ້າພະເຈົ້າ.
- ປາດຖະໜາທີ່ຈະຮັບບັບຕິດສະມາ.
- ມາສູ່ດ້ວຍໃຈທີ່ຊອກຊ້ຳ ແລະ ວິນຍານທີ່ສຳນຶກຜິດ.
- ກັບໃຈຈາກບາບທັງໝົດຂອງເຂົາເຈົ້າ.
- ເຕັມໃຈທີ່ຈະຮັບເອົາພະນາມຂອງພະເຢຊູຄຣິດ.
- ຕັ້ງໃຈທີ່ຈະຮັບໃຊ້ພະຄຣິດຈົນເຖິງທີ່ສຸດ.
- ສະແດງໃຫ້ເຫັນໂດຍການກະທຳຂອງເຂົາເຈົ້າວ່າ ເຂົາເຈົ້າໄດ້ຮັບເອົາພະວິນຍານຂອງພະຄຣິດໄວ້ຈົນເຖິງຮັບການປົດບາບຂອງເຂົາເຈົ້າ.

ໝາຍເຫດ

ຫລັງຈາກຜູ້ປ່ຽນໃຈເຫລື້ອມໃສທີ່ມີຄ່າຄວນໄດ້ຮັບບັບຕິດສະມາແລ້ວ, ເຂົາເຈົ້າຈະໄດ້ຮັບການຢືນຢັນເປັນສະມາຊິກຂອງສາດສະໜາຈັກ ແລະ ຂອງປະທານແຫ່ງພະວິນຍານບໍລິສຸດຈະຖືກມອບໃຫ້ເຂົາເຈົ້າ. ການຢືນຢັນນີ້ຈະກະທຳບໍ່ດົນຫລັງຈາກການຮັບບັບຕິດສະມາ ພາຍໃຕ້ການນຳພາຂອງອະທິການ ຫລື ປະທານສາຂາ ໃນກອງປະຊຸມສິນລະລຶກ. ຂະນະທີ່ພິທີການທັງສອງນີ້ບໍ່ຫ່າງກັນດົນປານໃດ, ການຢືນຢັນນີ້ ເຮັດໃຫ້ການຮັບບັບຕິດສະມາສົມບູນ.

## ການສຶກສາພະຄຳພີ

**ໃນທາງໃດແດ່ທີ່ຂອງປະທານແຫ່ງພະວິນຍານບໍລິສຸດເປັນສິ່ງໜຶ່ງໃນຂອງປະທານທີ່ຍິ່ງໃຫຍ່ທີ່ສຸດທີ່ເຮົາສາມາດຮັບໄດ້?**

| | | |
|---|---|---|
| 3 ນີໄຟ 19:1–13 | ໂຢຮັນ 3:5 | ຄາລາເຕຍ 5:22–25 |
| D&C 45:56–57 | ໂຢຮັນ 14:26 | Guide to the Scriptures, "Holy Ghost" |

**ເປັນຫຍັງຜູ້ປ່ຽນໃຈເຫລື້ອມໃສຄວນຈະປາດຖະໜາຮັບເອົາຂອງປະທານແຫ່ງພະວິນຍານບໍລິສຸດ?**

| | | |
|---|---|---|
| 2 ນີໄຟ 31:12–17 | ກິດຈະການ 8:14–17 | ກິດຈະການ 19:1–6 |
| 2 ນີໄຟ 32:1–5 | | |

## ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ

ຄົ້ນຄວ້າຂໍ້ພະຄຳພີດັ່ງຕໍ່ໄປນີ້ ແລະ ຂຽນລາຍການຂອງຄວາມເໝາະສົມ ແລະ ພັນທະສັນຍາຂອງການຮັບບັບຕິດສະມາ. ສົນທະນາກັບຄູ່ສອນສາດສະໜາຂອງທ່ານກ່ຽວກັບວິທີສອນເງື່ອນໄຂເຫລົ່ານັ້ນໃຫ້ຄົນອື່ນໆ.

| | | |
|---|---|---|
| 2 ນີໄຟ 31:13 | Alma 7:14–16 | ໂມໂລໄນ 6:1–4 |
| ໂມໄຊຢາ 18:8–10 | 3 ນີໄຟ 11:21–41 | D&C 20:37 |

## ການສ້າງສັນສາດສະໜາຈັກ

ເມື່ອຜູ້ຄົນໄດ້ຮັບບັບຕິດສະມາ ແລະ ຮັບການຢືນຢັນເປັນສະມາຊິກຂອງສາດສະໜາຈັກແລ້ວ, ໃຫ້ເຮັດວຽກນຳ ຜູ້ນຳຂອງຫວອດ ແລະ ສະມາຊິກຕໍ່ໄປ ເພື່ອຊ່ອຍເຫລືອຜູ້ປ່ຽນໃຈເຫລື້ອມໃສໃໝ່ເຫລົ່ານີ້ປັບຕົວເຂົ້າກັບຊີວິດໃໝ່ຂອງເຂົາເຈົ້າ ແລະ ເຕີບ ໂຕທາງດ້ານວິນຍານອີກຕໍ່ໄປ. ສາດສະໜາຈັກຈະໝັ້ນຄົງເມື່ອຄົນຜູ້ມີປະຈັກພະຍານໄດ້ຮັບບັບຕິດສະມາ ແລະ ຮັບການຢືນຢັນ, ຮັກສາພັນທະສັນຍາຂອງເຂົາເຈົ້າ, ຕຽມພ້ອມຢ່າງເຂັ້ມ ແຂງເພື່ອຈະໄປພະວິຫານ ແລະ ຊ່ອຍໃຫ້ຫວອດ ຫລື ສາຂາເຂັ້ມແຂງຂຶ້ນ.

ຜູ້ປ່ຽນໃຈເຫລື້ອມໃສ່ທີ່ມີເພື່ອນເປັນສະມາຊິກ, ຜູ້ທີ່ໄດ້ຮັບມອບໝາຍໜ້າທີ່ຮັບຜິດຊອບ, ແລະ ຜູ້ທີ່ໄດ້ຮັບການລ້ຽງດູໂດຍພະຄຳຂອງພະເຈົ້າ ຈະເຕີບ ໂຕໃນປະຈັກພະຍານ ແລະ ສັດທາ. ຜູ້ສອນສາດສະໜາ, ຜູ້ນຳຂອງຫວອດ, ແລະ ສະມາຊິກຂອງສາດສະໜາຈັກທັງຫລາຍບໍ່ຄວນປະຖິ້ມຄວາມຮັບຜິດຊອບຂອງເຂົາເຈົ້າໃນການລ້ຽງດູ ແລະ ເພີ່ມຄວາມເຂັ້ມແຂງໃຫ້ແກ່ສະມາຊິກໃໝ່.

## ຜູ້ສອນສາດສະໜາທີ່ປະສົບຜົນສຳເລັດ

ຜົນສຳເລັດຂອງທ່ານໃນຖານະເປັນຜູ້ສອນສາດສະໜາ ສ່ວນຫລາຍວັດແທກໂດຍຄຳໝັ້ນສັນຍາໃນການຊອກ ຫາຄົນ, ສອນຄົນ, ໃຫ້ບັບຕິດສະມາ ແລະ ຢືນຢັນຄົນ ແລະ ຊ່ອຍໃຫ້ເຂົາເຈົ້າເປັນສະມາຊິກທີ່ສັດຊື່ຂອງສາດສະໜາຈັກຜູ້ທີ່ມີພະວິນຍານບໍລິສຸດຢູ່ນຳ.

ຈົ່ງຫລີກລ້ຽງການປຽບທຽບຕົວຂອງທ່ານກັບຜູ້ສອນສາດສະໜາຄົນອື່ນ ແລະ ວັດແທກຜົນທີ່ອອກມາຂອງທ່ານຕໍ່ຂອງເຂົາເຈົ້າ ດັ່ງເຊັ່ນຈຳນວນຄົນທີ່ຮັບບັບຕິດສະມາ. ໃຫ້ຈື່ຈຳວ່າຄົນມີສິດທີ່ຈະເລືອກວ່າຈະຍອມຮັບຂ່າວສານຂອງທ່ານຫລືບໍ່. ໜ້າທີ່ຮັບຜິດຊອບຂອງທ່ານແມ່ນສອນໃຫ້ແຈ່ມແຈ້ງ ແລະ ດ້ວຍອຳນາດ ເພື່ອເຂົາເຈົ້າຈະເຮັດການເລືອກທີ່ຖືກຕ້ອງ. ບາງຄົນ

ໝາຍເຫດ

ອາດຈະບໍ່ຍອມຮັບຂ່າວສານຂອງທ່ານ ເຖິງແມ່ນວ່າເຂົາເຈົ້າໄດ້ຮັບ ພະຍານທາງດ້ານວິນຍານວ່າ ຂ່າວສານຂອງທ່ານເປັນຄວາມຈິງ. ທ່ານຈະໂສກເສົ້າເພາະທ່ານຮັກເຂົາເຈົ້າ ແລະ ຢາກໃຫ້ເຂົາເຈົ້າໄດ້ຮັບຄວາມລອດ. ແຕ່ທ່ານບໍ່ຄວນທໍ້ຖອຍ; ການທໍ້ຖອຍຈະເຮັດໃຫ້ສັດທາຂອງທ່ານອ່ອນແອລົງ. ຖ້າທ່ານລົດຄວາມຄາດຫວັງຂອງທ່ານລົງ, ຄວາມສຳເລັດຜົນຂອງທ່ານຈະລົດລົງ, ຄວາມປາດຖະໜາ ຂອງທ່ານຈະອ່ອນແອ, ແລະ ທ່ານຈະມີຄວາມຫຍຸ້ງຍາກຫລາຍຂຶ້ນທີ່ຈະເຮັດຕາມພະວິນຍານ.

ທ່ານສາມາດຮູ້ວ່າທ່ານເປັນຜູ້ສອນສາດສະໜາທີ່ປະສົບຜົນສຳເລັດເມື່ອທ່ານ:

- ຮູ້ສຶກພະວິນຍານສະແດງປະຈັກພະຍານຕໍ່ຜູ້ຄົນຜ່ານທ່ານ.
- ຮັກຜູ້ຄົນ ແລະ ຢາກໃຫ້ເຂົາເຈົ້າໄດ້ຮັບຄວາມລອດ.
- ເຊື່ອຟັງກົດສຳລັບຜູ້ສອນສາດສະໜາທຸກຢ່າງ.
- ດຳລົງຊີວິດແບບທີ່ທ່ານຈະສາມາດໄດ້ຮັບ ແລະ ຮູ້ວິທີທີ່ຈະເຮັດຕາມພະວິນຍານ, ຜູ້ທີ່ຈະສະແດງໃຫ້ທ່ານຮູ້ວ່າຈະໄປທາງໃດ, ເຮັດແນວໃດ ແລະ ເວົ້າສິ່ງໃດ.
- ພັດທະນາຄຸນສົມບັດທີ່ເໝືອນກັບພະຄິດ.
- ເຮັດວຽກງານໃຫ້ໄດ້ຜົນດີຂຶ້ນທຸກໆວັນ, ເຮັດໃຫ້ດີເທົ່າທີ່ທ່ານຈະເຮັດໄດ້ເພື່ອນຳຜູ້ຄົນມາສູ່ພະຄິດ, ແລະ ສະແຫວງຫາດ້ວຍຄວາມພາກພຽນທີ່ຈະຮຽນຮູ້ ແລະ ປັບປຸງ.
- ຊ່ອຍສ້າງສາດສະໜາຈັກ (ຫວອດ) ໃນບ່ອນໃດກໍຕາມທີ່ທ່ານໄດ້ຖືກມອບໝາຍໃຫ້ເຮັດວຽກງານເຜີຍແຜ່.
- ເຕືອນຜູ້ຄົນກ່ຽວກັບຜົນທີ່ຕາມມາຂອງການເຮັດບາບ. ເຊື້ອເຊີນໃຫ້ເຂົາເຈົ້າເຮັດ ແລະ ຮັກສາຄຳໝັ້ນສັນຍາ.
- ສອນ ແລະ ຮັບໃຊ້ຜູ້ສອນສາດສະໜາຄົນອື່ນໆ.
- ໄປເຮັດຄຸນງາມຄວາມດີ ແລະ ຮັບໃຊ້ຜູ້ຄົນທຸກໆຄັ້ງທີ່ມີໂອກາດ, ບໍ່ວ່າເຂົາເຈົ້າຈະຍອມຮັບຂ່າວສານ ຂອງທ່ານຫລືບໍ່ກໍຕາມ.

ເມື່ອທ່ານໄດ້ກະທຳໃຫ້ດີທີ່ສຸດແລ້ວ, ທ່ານອາດຈະຍັງປະສົບຄວາມຜິດຫວັງຢູ່, ແຕ່ທ່ານຈະບໍ່ຜິດຫວັງໃນຕົວຂອງທ່ານເອງ. ທ່ານຈະສາມາດຮູ້ຢ່າງແນ່ນອນວ່າພະຜູ້ເປັນເຈົ້າພໍພະໄທເມື່ອທ່ານຮູ້ສຶກວ່າ ພະວິນຍານເຮັດວຽກງານຜ່ານ ຕົວທ່ານ.

## ການສຶກສາພະຄຳພີ

**ຜູ້ຮັບໃຊ້ຂອງພະຜູ້ເປັນເຈົ້າຮູ້ສຶກແນວໃດກ່ຽວກັບວຽກງານນີ້? ຜູ້ຮັບໃຊ້ຂອງພະຜູ້ເປັນເຈົ້າຈະຊັກຊວນຜູ້ທີ່ເຂົາເຈົ້າຮັບໃຊ້ໄດ້ແນວໃດ?**

| | | |
|---|---|---|
| Mosiah 28:3 | 3 ນີໄຟ 28:4–10 | D&C 68:2–6 |
| Alma 8:14–15 | Ether 12:13–15 | |
| Helaman 10:3–5 | D&C 15:4–6; 16:4–6 | |

## ກິດຈະກຳ: ການສຶກສາສ່ວນຕົວ

- ອ່ານ Helaman 10:1–5 ແລະ 3 Nephi 7:17–18. ພະຜູ້ເປັນເຈົ້າໄດ້ຮູ້ສຶກແນວໃດກ່ຽວກັບຜູ້ສອນສາດສະໜາເຫລົ່ານີ້ ແລະ ການຮັບໃຊ້ຂອງເຂົາເຈົ້າ?
- ໃຫ້ຄິດເຖິງຄວາມພະຍາຍາມທາງການເຜີຍແຜ່ຂອງ ອາບິນາໄດ ແລະ ແອມັນ (ເບິ່ງ Mosiah 11–16; ໂມໄຊຢາ 17–18; Alma 17–20, 23–24). ເປັນຫຍັງຜູ້ສອນສາດສະໜາທັງສອງຄົນນີ້ໄດ້ປະສົບຜົນສຳເລັດ ເຖິງແມ່ນວ່າຜົນທີ່ອອກມາໃນທັນທີທັນໃດຂອງເຂົາເຈົ້າແຕກຕ່າງກັນ?
- ໃຫ້ບັນທຶກສິ່ງທີ່ທ່ານຮຽນໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

ໝາຍເຫດ

### ໃຫ້ຈື່ຈໍາສິ່ງນີ້

- ເປົ້າໝາຍຂອງທ່ານແມ່ນເພື່ອເຊື້ອເຊີນຄົນອື່ນໆໃຫ້ມາສູ່ພຣະຄຣິດໂດຍການຊ່ອຍເຂົາເຈົ້າ ໃຫ້ຮັບພຣະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ຜ່ານການມີສັດທາໃນພຣະເຢຊູຄຣິດ ແລະ ການຊົດໃຊ້ຂອງພຣະອົງ, ການກັບໃຈ, ການຮັບບັບຕິສະມາ, ການຮັບເອົາພຣະວິນຍານບໍລິສຸດ, ແລະ ການອົດທົນຈົນເຖິງທີ່ສຸດ.
- ພຣະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ຂອງພຣະເຢຊູຄຣິດເປັນວິທີດຽວ ເຊິ່ງໂດຍວິທີນັ້ນເຮົາຈະສາມາດພົບຄວາມສຸກນິລັນດອນໄດ້.
- ການເອີ້ນຂອງທ່ານ ໃຫ້ອໍານາດແກ່ທ່ານ; ການຮັກສາພັນທະສັນຍາ ໃຫ້ພະລັງແກ່ທ່ານ.
- ຄວາມສົມບູນຂອງພຣະກິດຕິຄຸນຂອງພຣະເຢຊູຄຣິດໄດ້ຖືກຟື້ນຟູຜ່ານ ສາດສະດາ ໂຈເຊັບ ສະມິດ. ພຣະຄໍາພີມໍມອນເປັນຫລັກຖານວ່າ ໂຈເຊັບ ສະມິດ ໄດ້ເປັນສາດສະດາ.
- ທ່ານຊ່ອຍຜູ້ຄົນໃຫ້ດໍາລົງຊີວິດໃນພຣະກິດຕິຄຸນໂດຍເຊື້ອເຊີນເຂົາເຈົ້າໃຫ້ເຮັດ ແລະ ຮັກສາຄໍາໝັ້ນສັນຍາ.
- ທ່ານສະແດງຄວາມຮັກ ແລະ ຄວາມຮູ້ບຸນຄຸນຂອງທ່ານຕໍ່ພຣະຜູ້ເປັນເຈົ້າ ສໍາລັບການຊົດໃຊ້ຂອງພຣະອົງໂດຍການນໍາຈິດວິນຍານທັງຫລາຍມາສູ່ພຣະອົງ.
- ທ່ານຈະປະສົບຜົນສໍາເລັດເມື່ອທ່ານເຊື່ອຟັງ, ດໍາລົງຊີວິດດ້ວຍຄວາມຊອບທໍາ, ແລະ ເຮັດໃຫ້ດີທີ່ສຸດໃນການຊ່ອຍເຫລືອຄົນອື່ນໆໃຫ້ດໍາລົງຊີວິດຕາມພຣະກິດຕິຄຸນ.

## ວຽກງານເຜີຍແຜ່

ຕໍ່ໄປນີ້ແມ່ນຂໍ້ຄວາມຂອງປະທານຂອງສາດສະໜາຈັກໃນຍຸກສະໄໝນີ້.

### ປະທານ ໂຈເຊັບ ສະມິດ (1830–1844)

"ຫລັງຈາກທຸກຢ່າງທີ່ໄດ້ເວົ້າມາແລ້ວ, ໜ້າທີ່ ທີ່ຍິ່ງໃຫຍ່ ແລະ ສໍາຄັນທີ່ສຸດແມ່ນການສອນພຣະກິດຕິຄຸນ" *Teachings of the Prophet Joseph Smith*, sel. Joseph Fielding Smith [1976], 113).

"ຂໍໃຫ້ສິດທິຊົນຍຸກສຸດທ້າຍຈື່ຈໍາໄວ້ວ່າສິ່ງຍິ່ງໃຫຍ່ຂຶ້ນຢູ່ກັບຄວາມພະຍາຍາມສ່ວນຕົວ, ແລະ ເຂົາເຈົ້າໄດ້ຖືກ ເອີ້ນເພື່ອຮ່ວມເຮັດວຽກງານນໍາເຮົາ ແລະ ພຣະວິນຍານບໍລິສຸດ ເພື່ອເຮັດໃຫ້ວຽກງານຍິ່ງໃຫຍ່ຂອງວັນສຸດທ້າຍບັນລຸຜົນສໍາເລັດ" (*Teachings of the Prophet Joseph Smith*, 178–79).

### ປະທານ ບະລິກໍາ ຢັງ (1847–1877)

"ບໍ່ແມ່ນຊາຍ ຫລື ຍິງໃນສາດສະໜາຈັກນີ້ຜູ້ທີ່ບໍ່ໄດ້ເຮັດການເຜີຍແຜ່. ການເຜີຍແຜ່ນັ້ນຈະຍາວນານເທົ່າໆກັບ ການມີຊີວິດຢູ່ຂອງເຂົາເຈົ້າ ແລະ ແມ່ນເພື່ອເຮັດຄວາມດີ, ສົ່ງເສີມຄວາມຊອບທໍາ, ເພື່ອສອນຫລັກທໍາຂອງຄວາມຈິງ ແລະ ຊັກຊວນຕົວເຂົາເຈົ້າເອງ ແລະ ຄົນອື່ນໆທີ່ຢູ່ອ້ອມຂ້າງເຂົາເຈົ້າໃຫ້ດໍາລົງຊີວິດຕາມຫລັກທໍາ ເພື່ອ ເຂົາເຈົ້າຈະໄດ້ຮັບຊີວິດນິລັນດອນ" (*Discourses of Brigham Young*, sel. John A. Widtsoe [1954], 322).

### ປະທານ ຈອນ ເທເລີ (1880–1887)

"ໜ້າທີ່ຂອງເຮົາແມ່ນເພື່ອສອນພຣະກິດຕິຄຸນແກ່ມະນຸດທຸກຄົນ. . . . ນີ້ເປັນສິ່ງທີ່ພຣະເຈົ້າຄາດຫວັງຈາກເຮົາ" (*The Gospel Kingdom*, sel. G. Homer Durham [1943], 234–35).

### ປະທານ ວິວຟອດ ວູດຣັບ (1889–1898)

"ເຮົາມາສູ່ໂລກນີ້ດ້ວຍພາລະເຊິ່ງໄດ້ມອບໝາຍໃຫ້ເຮົາ . . . ເພື່ອເຮົາອາດຈະມີພະລັງທີ່ຈະກ້າວເດີນຕໍ່ໄປ ແລະ ເຕືອນປະຊາຊາດຂອງໂລກ. . . . ໃນຖານະເປັນແອວເດີໃນອິດສະລາເອນ, ພວກເຮົາໜ້ອຍຄົນທີ່ເຂົ້າໃຈຕໍາແໜ່ງຂອງເຮົາ,

ໝາຍເຫດ

ການເອີ້ນຂອງເຮົາ, ຄວາມສຳພັນຂອງເຮົາຕໍ່ພະເຈົ້າ, ໜ້າທີ່ຮັບຜິດຊອບຂອງເຮົາ, ຫລື ວຽກງານທີ່ພະຜູ້ເປັນເຈົ້າຕ້ອງການໃຫ້ເຮົາເຮັດ" (*The Discourses of Wilford Woodruff*, sel. G. Homer Durham [1946], 124).

## ປະທານ ໂລເລັນໂຊ ສະໂນ (1898–1901)

"ບໍ່ມີມະນຸດມະຕະຜູ້ໃດທີ່ຈະສົນໃຈໃນຜົນສຳເລັດຂອງແອວເດີຄົນໜຶ່ງເມື່ອເຂົາສອນພະກິດຕິຄຸນ ຫລາຍກວ່າພະຜູ້ເປັນເຈົ້າທີ່ໄດ້ສົ່ງເຂົາໃຫ້ໄປສອນຜູ້ຄົນທີ່ເປັນລູກໆຂອງພະຜູ້ເປັນເຈົ້າ" (*The Teachings of Lorenzo Snow*, comp. Clyde J. Williams [1984], 70).

## ປະທານ ໂຢເຊັບ ແອັບ ສະມິດ (1901–1918)

"ພວກເຮົາມີພາລະກິດຢູ່ໃນໂລກນີ້: ຊາຍແຕ່ລະຄົນ, ຍິງແຕ່ລະຄົນ, ເດັກແຕ່ລະຄົນ ຜູ້ມີອາຍຸທີ່ຈະຮັບຜິດຊອບ ຫລື ຈະເລີນເຕີບໂຕທີ່ຈະເຂົ້າໃຈ ຄວນ . . . ມີຄ່າຄວນພໍທີ່ຈະສອນຄວາມຈິງ ແລະ ສະແດງປະຈັກພະຍານກ່ຽວກັບຄວາມຈິງ" (Gospel Doctrine, 13th ed. [1968], 251–52).

## ປະທານ ຮີເບີ ເຈ ກະແລນ (1918–1945)

"ພວກເຮົາໃນຖານະເປັນສະມາຊິກຂອງສາດສະໜາຈັກ ມີສິ່ງໜຶ່ງທີ່ສຳຄັນທີ່ສຸດທີ່ຕ້ອງເຮັດ, ເຊິ່ງແມ່ນເພື່ອເອີ້ນ ຊາວໂລກໃຫ້ກັບໃຈຈາກບາບ ແລະ ມາສູ່ພະເຈົ້າ. ແລະ ໜ້າທີ່ເໜືອກວ່າສິ່ງອື່ນໃດຂອງເຮົາແມ່ນກ້າວເດີນໄປ ແລະ ປະກາດພະກິດຕິຄຸນຂອງພະຜູ້ເປັນເຈົ້າພະເຢຊູຄຣິດ, ການຟື້ນຟູແຜນແຫ່ງຊີວິດ ແລະ ຄວາມລອດຄືນມາໃໝ່ສູ່ໂລກ. . . . ແທ້ຈິງແລ້ວພວກເຮົາມີໄຂ່ມຸກອັນລ້ຳຄ່າ. ພວກເຮົາມີສິ່ງທີ່ມີຄ່າຫລາຍກວ່າຊັບສິນ ແລະ ຂໍ້ມູນທາງວິທະຍາສາດເຊິ່ງມີຢູ່ໃນໂລກ. ພວກເຮົາມີແຜນແຫ່ງຊີວິດ ແລະ ຄວາມລອດ. . . . ວິທີທີ່ດີທີ່ສຸດໃນໂລກເພື່ອຈະສະແດງຄວາມຮັກຂອງເຮົາຕໍ່ເພື່ອນບ້ານແມ່ນການກ້າວເດີນໄປ ແລະ ປະກາດພະກິດຕິຄຸນຂອງພະຜູ້ເປັນເຈົ້າ ພະເຢຊູຄຣິດ, ທີ່ພະອົງໄດ້ມອບຄວາມຮູ້ທີ່ແນ່ນອນໃຫ້ແກ່ເຮົາກ່ຽວກັບຄວາມສັກສິດຂອງພະກິດຕິຄຸນນັ້ນ" (in Conference Report, Apr. 1927, 175–76).

## ປະທານ ຈອດ ອາເບີດ ສະມິດ (1945–1951)

"ນັ້ນຄືພາລະກິດຂອງພວກທ່ານ, ອ້າຍເອື້ອຍນ້ອງທັງຫລາຍຂອງສາດສະໜາຈັກ, ນັ້ນແມ່ນໜ້າທີ່ຮັບຜິດຊອບຂອງພວກທ່ານ. ພວກທ່ານໄດ້ຮັບເອົາຢ່າງເຕັມໃຈ ແລະ ພະບິດາເທິງສະຫວັນຂອງເຮົາຫວັງໃຫ້ ພວກທ່ານແບ່ງປັນຄວາມຈິງທີ່ໜ້າສັນລະເສີນເຫລົ່ານີ້ໃຫ້ລູກຊາຍ ແລະ ລູກສາວຄົນອື່ນໆຂອງພະອົງ ຢ່າງເຕັມໃຈຄືກັນ. (*Sharing the Gospel with Others*, sel. Preston Nibley [1948], 213).

"ເຮົາຈະໄດ້ຮັບຄວາມສູງສົ່ງຂອງເຮົາໃນອານາຈັກຊັ້ນສູງພຽງເງື່ອນໄຂທີ່ວ່າເຮົາຈະແບ່ງປັນພອນແຫ່ງພະກິດຕິຄຸນຂອງພະເຢຊູຄຣິດໃຫ້ລູກຄົນອື່ນໆຂອງພະບິດາຂອງເຮົາ ແລະ ຮັກສາພະບັນຍັດເຊິ່ງຈະເຮັດໃຫ້ຊີວິດຂອງເຮົາຢູ່ນີ້ ແລະ ຫລັງຈາກນີ້ຕໍ່ໄປອຸດົມສົມບູນ" (*Sharing the Gospel with Others*, 190).

## ປະທານ ດາວິດ ໂອ ມິກເຄ (1951–1970)

"ສະມາຊິກທຸກຄົນ . . . ຄືຜູ້ສອນສາດສະໜາ!" (in Conference Report, Apr. 1959, 122).

"ຄວາມເປັນຄຣິດສະຕຽນຄືມີຄວາມຮັກໃນການກະທຳ. ບໍ່ມີວິທີທີ່ຈະສະແດງຄວາມຮັກຕໍ່ພະເຈົ້າໄດ້ດີກວ່າການສະແດງຄວາມຮັກທີ່ບໍ່ເຫັນແກ່ຕົວຕໍ່ເພື່ອນມະນຸດດ້ວຍກັນ. ນີ້ຄືວິນຍານຂອງການເຜີຍແຜ່ສາດສະໜາ" (*Gospel Ideals* [1954], 129).

## ປະທານ ໂຢເຊັບ ຟຽວດິງ ສະມິດ (1970–1972)

"ພວກເຮົາເຄີຍໄດ້ຍິນວ່າເຮົາທຸກຄົນເປັນຜູ້ສອນສາດສະໜາ. ສະມາຊິກທຸກຄົນ . . . ເປັນ ຫລື ຄວນຈະເປັນຜູ້ສອນສາດສະໜາ; . . . ໃນຖານະເປັນສະມາຊິກຂອງສາດສະໜາຈັກ, ທີ່ໄດ້ປະຕິຍານຕົວຕໍ່ຄວາມກ້າວໜ້າຂອງພະກິດຕິຄຸນຂອງພະເຢຊູຄຣິດ ເຮົາໄດ້ກາຍເປັນຜູ້ສອນສາດສະໜາ. ນີ້ຄືຄວາມຮັບຜິດຊອບຂອງສະມາຊິກທຸກໆຄົນ ໃນສາດສະໜາຈັກ" (*Take Heed to Yourselves* [1971], 27–28).

ໝາຍເຫດ

## ປະທານ ແຮໂລນ ບີ ລີ (1972–1973)

"ວຽກງານເຜີຍແຜ່ຄືການສອນປະຈຳບ້ານແກ່ຜູ້ທີ່ຍັງບໍ່ໄດ້ເປັນສະມາຊິກຂອງສາດສະໜາຈັກ, ແລະ ຕາມຈິງແລ້ວ, ການສອນປະຈຳບ້ານຄືວຽກງານເຜີຍແຜ່ຂອງຜູ້ເປັນສະມາຊິກຂອງສາດສະໜາຈັກ. (*Improvement Era*, Dec. 1964, 1078).

## ປະທານ ສະເປັນເຊີ ດັບເບີນຢູ ຄິມໂບ (1973–1985)

"ດຽວນີ້ເປັນຊ່ວງເວລາໜຶ່ງຂອງຕາຕະລາງຂອງພະຜູ້ເປັນເຈົ້າທີ່ຈະແຜ່ພະກິດຕິຄຸນໃຫ້ອອກໄປຫລາຍກວ່າທີ່ ເຄີຍເປັນມາແຕ່ກ່ອນ. ໃນໂລກນີ້ມີຄົນຮ້ອງໄຫ້, ໂດຍຕັ້ງໃຈ ແລະ ບໍ່ຕັ້ງໃຈ, ວ່າ 'ມາພີ້ແດ່ . . . ມາຊ່ອຍພວກເຮົາແດ່.' ບາງຄົນອາດຈະເປັນເພື່ອນບ້ານຂອງທ່ານ. ບາງຄົນອາດຈະເປັນໝູ່ເພື່ອນຂອງທ່ານ. ບາງຄົນອາດຈະເປັນພີ່ນ້ອງຂອງທ່ານ. ບາງຄົນອາດຈະເປັນຄົນທີ່ທ່ານພົບພຽງແຕ່ມື້ວານນີ້. ແຕ່ເຮົາມີສິ່ງທີ່ເຂົາເຈົ້າຕ້ອງການ. ຈົ່ງເຮັດໃຫ້ເຮົາມີຄວາມກ້າຫານອັນໃໝ່ຈາກການສຶກສາຂອງເຮົາ ແລະ ອະທິຖານ, ເໝືອນດັ່ງ ເປໂຕ, 'ພະຜູ້ເປັນເຈົ້າ . . . ຂໍໂຜດ ໃຫ້ພວກຂ້າພະອົງທີ່ເປັນຜູ້ຮັບໃຊ້ພະອົງກ່າວພະຄຳດ້ວຍໃຈກ້າຫານຍິ່ງຂຶ້ນແດ່ທ້ອນ' (ກິດຈະການ 4:29)" (*Teachings of Spencer W. Kimball* [1982], 546).

## ປະທານ ເອສະລາ ແທັບ ເບັນສັນ (1985–1994)

"ພວກເຮົາຕ້ອງແບ່ງປັນພະກິດຕິຄຸນກັບຄົນອື່ນໆ. ນັ້ນເປັນໜ້າທີ່ຮັບຜິດຊອບຂອງພວກເຮົາ—ສະມາຊິກທຸກໆຄົນເປັນຜູ້ສອນສາດສະໜາ. ນັ້ນຄືສິ່ງທີ່ສາດສະດາທັງຫລາຍຂອງພະເຈົ້າເອີ້ນເຮົາໃຫ້ເຮັດ. . . .

". . . ວຽກງານເຜີຍແຜ່ຂອງສະມາຊິກເປັນສິ່ງໜຶ່ງໃນຂໍກະແຈທີ່ຍິ່ງໃຫຍ່ຕໍ່ການເຕີບໂຕຂອງສະມາຊິກຂອງເຮົາແຕ່ລະຄົນ. ມັນແມ່ນຄວາມເຊື່ອໝັ້ນຂອງຂ້າພະເຈົ້າທີ່ວຽກງານເຜີຍແຜ່ສາດສະໜາຂອງສະມາຊິກ ຈະເຮັດໃຫ້ຫວອດໃດກໍຕາມທີ່ເຮັດຕາມຫລັກທຳນີ້ ສູງຂຶ້ນທາງວິນຍານ. (*Teachings of Ezra Taft Benson*, 208–9).

## ປະທານ ຮາວເວີດ ດັບເບີນຢູ ຮັນເທີ (1994–1995)

"ແນ່ນອນ ການນຳພະກິດຕິຄຸນໄປສູ່ທຸກຊົນເຜົ່າ, ທຸກພາສາ, ແລະ ທຸກຊົນຊາດ ເປັນໜ້າທີ່ຮັບຜິດຊອບອັນດຽວທີ່ຍິ່ງໃຫຍ່ສຸດ ທີ່ເຮົາມີໃນຊີວິດນີ້. . . . ພວກເຮົາມີສິດພິເສດທີ່ໄດ້ເກີດໃນຍຸກສຸດທ້າຍເຫລົ່າ, ທີ່ຕ່າງກັນກັບບາງຍຸກສະໄໝທີ່ຜ່ານມາ, ເພື່ອຊ່ອຍນຳເອົາພະກິດຕິຄຸນໄປສູ່ທົ່ວໂລກ" ("Walls of the Mind," *Ensign*, Sept. 1990, 10).

"ການຊົດໃຊ້ກ່ຽວຂ້ອງຫຍັງກັບວຽກງານເຜີຍແຜ່ສາດສະໜາ? ເວລາໃດກໍຕາມທີ່ເຮົາໄດ້ຮັບພອນຂອງການຊົດໃຊ້ໃນຊີວິດຂອງເຮົາ, ເຮົາບໍ່ສາມາດທີ່ຈະອົດເປັນຫ່ວງນຳຄວາມສະຫວັດດີການຂອງຄົນອື່ນໆ. . . . ສິ່ງຊີ້ ບອກທີ່ຍິ່ງໃຫຍ່ຂອງການປ່ຽນແປງສ່ວນຕົວຂອງຄົນໃດຄົນໜຶ່ງ ແມ່ນຄວາມປາດຖະໜາທີ່ຈະແບ່ງປັນພະກິດຕິຄຸນໃຫ້ກັບຄົນອື່ນໆ." ("The Atonement and Missionary Work," seminar for new mission presidents, June 1994).

## ປະທານ ກໍດອນ ບີ ຮິງລີ (1995– )

"ພວກເຮົາຢູ່ໃນໂລກນີ້ ເພື່ອຊ່ອຍເຫລືອພະບິດາຂອງເຮົາໃນວຽກງານ ແລະ ລັດສະໝີພາບຂອງພະອົງ, 'ທີ່ຈະເຮັດໃຫ້ເກີດຄວາມເປັນອຳມະຕະ ແລະ ຊີວິດນິລັນດອນຂອງມະນຸດ' (see Moses 1:39). ການຜູກມັດຂອງທ່ານໃນຂອບເຂດໜ້າທີ່ຮັບຜິດຊອບກໍສຳຄັນເທົ່າໆກັບການຜູກມັດໃນຂອບເຂດຂອງຂ້າພະເຈົ້າໃນໜ້າທີ່ຮັບຜິດຊອບ" (in Conference Report, Apr. 1995, 94; or *Ensign*, May 1995, 71).

"ຈົ່ງໃຫ້ມີການພັດທະນາຄວາມຮູ້ສຶກຕົວໃນຈິດໃຈຂອງສະມາຊິກທຸກໆຄົນກ່ຽວກັບຄວາມສາມາດຂອງເຂົາເອງໃນການນຳຄົນອື່ນໆໃຫ້ມາຮູ້ຄວາມຈິງ. ໃຫ້ເຂົາພະຍາຍາມເຮັດໃຫ້ໄດ້. ໃຫ້ເຂົາອະທິຖານດ້ວຍຄວາມຈິງໃຈອັນຍິ່ງໃຫຍ່ກ່ຽວກັບຄວາມສາມາດນັ້ນ" ("Find the Lambs, Feed the Sheep," *Ensign*, May 1999, 106).

# ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

ໝາຍເຫດ

## ການສຶກສາສ່ວນຕົວ

- ຕຽມຄຳເວົ້າ ຍາວປະມານສອງນາທີ ກ່ຽວກັບຄຳຖາມທີ່ມີຢູ່ທາງໜ້າຂອງບົດນີ້. ໃຫ້ຕຽມເພື່ອຈະແບ່ງປັນຄຳເວົ້າຂອງທ່ານ ນຳຄູ່ສອນສາດສະໜາ ຫລື ນຳຜູ້ສອນສາດສະໜາຄົນອື່ນໆໃນການປະຊຸມທ້ອງຖິ່ນ.

- ຂໍໃຫ້ຜູ້ປ່ຽນໃຈເຫລື້ອມໃສໃນບໍ່ດົນມານີ້ ເລົ່າເລື່ອງການປ່ຽນແປງຂອງເຂົາເຈົ້າ. ແມ່ນຫຍັງທີ່ໄດ້ຊ່ອຍ ໃຫ້ເຂົາເຈົ້າໄດ້ຮັບ "ສັດທາຈົນເຖິງການກັບໃຈ" (ແອລະມາ 34:17)? ເປັນຫຍັງເຂົາເຈົ້າໄດ້ຕັດສິນໃຈຮັບ ບັບຕິດສະມາ ແລະ ຮັບການຢືນຢັນ? ເຂົາເຈົ້າຮູ້ສຶກແນວໃດໃນການເປັນສະມາຊິກໃໝ່ຂອງສາດສະໜາຈັກ? ຜູ້ສອນສາດສະໜາຈະຮັບໃຊ້ເຂົາເຈົ້າໃຫ້ດີຂຶ້ນໄດ້ແນວໃດ?

- ພິຈາລະນາຄວາມໝາຍຂອງຄຳວ່າ ສິ່ງສຽງເຕືອນ (ເບິ່ງ Jacob 3:12; D&C 1:4; 38:41; 63:57–58; 88:81; 112:5; ເອເສກຽນ 3:17–21; 33:1–12). ຂຽນໃນຄຳຂອງທ່ານເອງວ່າມັນໝາຍຄວາມວ່າແນວໃດ ແລະ ທ່ານຈະເຮັດຕໍ່ໄປແນວໃດ?

- ຈົ່ງອ່ານ Mormon 8 ແລະ ໂມໂລໄນ ບົດທີ 1 ແລະ ບົດທີ 10. ເມື່ອທ່ານອ່ານ, ໃຫ້ຖາມຕົວເອງເອງວ່າ, "ໂມໂລໄນ ຫວັງແນວໃດໃນວັນຂອງເຮົາ? ເພິ່ນຕ້ອງການໃຫ້ເຮົາເຮັດຫຍັງນຳພະຄຳພີມໍມອນ? ເຮົາຈະເວົ້າຫຍັງຕໍ່ ໂມໂລໄນ ຖ້າເຮົາມີໂອກາດເວົ້ານຳເພິ່ນ?" ໃຫ້ບັນທຶກຄວາມຄິດຂອງທ່ານໄວ້ໃນປື້ມບັນທຶກການສຶກສາຂອງທ່ານ.

- ໄຕ່ຕ້ອງເຫດການໃນຊີວິດຂອງທ່ານທີ່ເຮັດໃຫ້ປະຈັກພະຍານຂອງທ່ານເຂັ້ມແຂງຂຶ້ນກ່ຽວກັບໂຢເຊັບ ສະມິດ ແລະ ການຟື້ນຟູ. ຫລັງຈາກນັ້ນ ໃຫ້ຕອບຄຳຖາມນີ້: ແມ່ນຫຍັງທີ່ຊ່ອຍໃຫ້ທ່ານຮູ້ວ່າ ພະບິດາເທິງສະຫວັນ ແລະ ພະເຢຊູຄຣິດໄດ້ປາກົດກາຍຕໍ່ໂຢເຊັບ ສະມິດ?

## ການສຶກສາກັບຄູ່ສອນສາດສະໜາ

- ແບ່ງປັນຄຳຕອບນຳກັນຈາກ "ໃຫ້ພິຈາລະນາເລື່ອງນີ້" ຢູ່ທາງໜ້າບົດ.

- ແບ່ງປັນນຳກັນກ່ຽວກັບສິ່ງທີ່ທ່ານຫວັງ ແລະ ປາດຖະໜາສຳລັບລະຍະເປັນຜູ້ສອນສາດສະໜາ ຕອນທ່ານໄດ້ຮັບການເອີ້ນໃຫ້ເປັນຜູ້ສອນສາດສະໜາ. ປະສົບການຂອງທ່ານໄດ້ຕອບສະໜອງຄວາມຄາດ ຫວັງຂອງທ່ານຫລາຍປານໃດ? ທ່ານຈະເຮັດແນວໃດເພື່ອຕອບສະໜອງຄວາມຄາດຫວັງຂອງທ່ານໃຫ້ສົມບູນຫລາຍຂຶ້ນ?

- ອ່ານ ແລະ ສົນທະນາ "Minister" ໃນ Guide to the Scriptures.

- ເລືອກຄົນໜຶ່ງໃນຈຳນວນຜູ້ສອນສາດສະໜາທີ່ຍິ່ງໃຫຍ່ດັ່ງຕໍ່ໄປນີ້, ແລະ ອ່ານຂໍ້ອ້າງອີງທີ່ບົ່ງໄວ້. ເມື່ອທ່ານອ່ານ, ໃຫ້ສົນທະນາວິທີທີ່ຜູ້ສອນສາດສະໜາຄົນນີ້ (1) ເຂົ້າໃຈ ແລະຜູກມັດຕົວເຂົາຕໍ່ການເອີ້ນຂອງເຂົາ, (2) ສະແດງອອກເຖິງຄຸນສົມບັດ ແລະ ຄວາມປາດຖະໜາຕໍ່ວຽກງານ, ແລະ (3) ໄດ້ຊ່ອຍເຫລືອຄົນອື່ນໆໃຫ້ຍອມຮັບພະກິດຕິຄຸນແນວໃດ.

| | | |
|---|---|---|
| ແອລະມາ (ໂມໄຊຢາ 18) | ນີໄຟ ແລະ ລີໄຮ (Helaman 5) | ໂປໂລ (ກິດຈະການ 16) |
| ອາໂລນ (Alma 22; 23:1–6) | ເປໂຕ (ກິດຈະການ 2) | |

ໝາຍເຫດ

- ໃນປຶ້ມເພງສວດ ແລະ ເພງຂອງເດັກນ້ອຍ, ໃຫ້ເລືອກສອງເພງ, ດັ່ງເຊັ່ນ "ພະວິນຍານຂອງພະເຈົ້າ," "ເຮົາຂອບພະໄທສຳລັບສາດສະດາ," ຫລື "ການອະທິຖານຄັ້ງທຳອິດຂອງໂຢເຊັບ ສະມິດ" (ເບິ່ງ *ເພງສວດ ແລະ ເພງຂອງເດັກນ້ອຍ*, [33438]). ໃຫ້ອ່ານຫລືຮ້ອງເພງສວດເຫລົ່ານັ້ນ. ສົນທະນາຄວາມໝາຍຂອງບົດເພງ.

- ອ່ານ "Faith," "Repent, Repentance," "Baptism, Baptize," ແລະ "Holy Ghost" ໃນ Guide to the Scriptures ນຳກັນ. ອ່ານ ແລະ ສົນທະນາຂໍ້ອ້າງອີງຂອງພະຄຳພີທຸກຂໍ້ ໃນແຕ່ລະເລື່ອງ.

- ອ່ານ "Dispensation" ໃນ Guide to the Scriptures ນຳກັນ. ໃຫ້ອ່ານ ແລະ ສົນທະນາ Doctrine and Covenants 136:37 ນຳອີກ.

## ການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດ

- ເຊື້ອເຊີນຜູ້ປ່ຽນໃຈເຫລື້ອມໃສໃນບໍ່ດົນມານີ້ ສອງ ຫລື ສາມຄົນ ໃຫ້ແບ່ງປັນປະສົບການກ່ຽວກັບການປ່ຽນແປງ. ເຂົາເຈົ້າຮູ້ສຶກແນວໃດກ່ຽວກັບຜູ້ສອນສາດສະໜາ? ກ່ຽວກັບສິ່ງທີ່ຜູ້ສອນສາດສະໜາໄດ້ສອນມາ? ກ່ຽວກັບການຮັກສາຄຳໝັ້ນສັນຍາ? ແມ່ນຫຍັງເປັນອິດທິພົນອັນແຮງກ້າທີ່ສຸດໃນການປ່ຽນແປງຂອງເຂົາເຈົ້າ?

- ເຊື້ອເຊີນຜູ້ນຳຖານະປະໂລຫິດໃຫ້ເວົ້ານຳຜູ້ສອນສາດສະໜາກ່ຽວກັບໂອກາດ ແລະ ຄວາມຫຍຸ້ງຍາກຂອງການສ້າງສາສາດສະໜາຈັກໃນເຂດຂອງທ່ານ.

- ອ່ານ Alma 17 ແລະ ສົນທະນາຄຳຖາມເຫລົ່ານີ້: ລາໂມໄນຮູ້ສຶກແນວໃດໃນຕອນຕົ້ນຂອງເລື່ອງ? ຄວາມຮູ້ສຶກເຫລົ່ານີ້ໄດ້ປ່ຽນແປງແນວໃດ? ຄົນ ຄົນໜຶ່ງຕ້ອງຮູ້ສຶກແນວໃດເພື່ອຈະໄດ້ຮັບພອນຂອງພະວິນຍານບໍລິສຸດ? ອ່ານ ແອລະມາ 34:15–16, ແລະ ປຽບທຽບມັນກັບເລື່ອງຂອງ ລາໂມໄນ. ການອຸທິດໃຊ້ຂອງພະຄິດ ສາມາດຊ່ອຍເຮົາໃຫ້ໄດ້ຮັບຄວາມເມດຕາໄດ້ແນວໃດ?

- ສົນທະນາກ່ຽວກັບຜົນສຳເລັດໃນຖານະເປັນຜູ້ສອນສາດສະໜາໝາຍຄວາມວ່າແນວໃດ. ເຊື້ອເຊີນຜູ້ສອນສາດສະໜາເພື່ອໃຫ້ຕົວຢ່າງທີ່ປະສົບຜົນສຳເລັດ.

- ແຍກຜູ້ສອນສາດສະໜາອອກເປັນສາມກຸ່ມ. ໃຫ້ກຸ່ມໜຶ່ງອ່ານ ກິດຈະການ 2:36–38 (ເປໂຕ), ໃຫ້ອີກ ກຸ່ມໜຶ່ງອ່ານ ກິດຈະການ 16:25–33 (ໂປໂລ), ແລະ ໃຫ້ກຸ່ມສຸດທ້າຍອ່ານ ໂມໄຊຢາ 18:8–11 (ແອລະມາ). ຂໍໃຫ້ແຕ່ລະກຸ່ມຕອບຄຳຖາມ, "ຜູ້ສອນສາດສະໜາເຮັດແນວໃດໃນການຊ່ອຍເຫລືອຄົນອື່ນໆໃຫ້ມີສັດທາ ເພີ່ມຂຶ້ນໃນພະຄິດ, ກັບໃຈ, ແລະ ຮັບບັບຕິດສະມາ ແລະ ຮັບການຢືນຢັນ?" ສົນທະນາສິ່ງທີ່ຜູ້ສອນ ສາດສະໜາຮຽນຈາກເລື່ອງເຫລົ່ານີ້ທີ່ສາມາດຊ່ອຍເຫລືອເຂົາເຈົ້າໃຊ້ສັດທາເມື່ອເຊື້ອເຊີນຜູ້ຄົນໃຫ້ກັບໃຈ, ຮັບບັບຕິດສະມາ, ແລະ ຮັບຂອງປະທານແຫ່ງພະວິນຍານບໍລິສຸດ.

- ສີ່ຫ້າມື້ກ່ອນການປະຊຸມ, ໃຫ້ຜູ້ສອນສາດສະໜາສີ່ຫ້າຄົນໄຕ່ຕອງຄຳຖາມທີ່ເລືອກໄວ້ຈາກ "ໃຫ້ພິຈາລະນາເລື່ອງນີ້" ຢູ່ທາງໜ້າຂອງບົດນີ້. ຂໍໃຫ້ຜູ້ສອນສາດສະໜາແຕ່ລະຄົນຕຽມເວົ້າສອງສາມນາທີ ກ່ຽວກັບຄຳຖາມທີ່ໄດ້ມອບໝາຍໃຫ້ເຂົາເຈົ້າ. ລະຫວ່າງການປະຊຸມທ້ອງຖິ່ນ ຫລື ກອງປະຊຸມເຂດ ປ່ອຍໃຫ້ຜູ້ສອນສາດສະໜາເວົ້າ. ຫລັງຈາກເວົ້າແລ້ວ, ໃຫ້ສົນທະນາສິ່ງທີ່ເຂົາເຈົ້າໄດ້ຮຽນມາ ແລະ ວິທີທີ່ເຂົາເຈົ້າ ຈະສາມາດນຳໃຊ້ມັນໃນວຽກງານເຜີຍແຜ່ຂອງເຂົາເຈົ້າ.

- ແຍກຜູ້ສອນສາດສະໜາອອກເປັນສີ່ກຸ່ມ. ຂໍໃຫ້ແຕ່ລະກຸ່ມຂຽນກ່ຽວກັບຄວາມຈິງ, ພັນທະສັນຍາ, ແລະ ພິທີການທີ່ໄດ້ຖືກຟື້ນຟູຄືນມາໃໝ່ ແລະ ຖືກເປີດເຜີຍຜ່ານສາດສະດາ ໂຈເຊັບ ສະມິດ ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້. ໃຫ້ແຕ່ລະກຸ່ມແບ່ງປັນຜົນທີ່ອອກມາຂອງເຂົາເຈົ້າ. ເຊື້ອເຊີນຜູ້ສອນສາດສະໜາທັງຫລາຍ ໃຫ້ແບ່ງປັນຄວາມຈິງທີ່ໄດ້ຖືກເປີດເຜີຍຜ່ານການຟື້ນຟູວ່າມີອິດທິພົນໃນຊີວິດຂອງເຂົາເຈົ້າແນວໃດ.

## ປະທານເຜີຍແຜ່

- ບາງຄັ້ງບາງຄາວ ລະຫວ່າງການສຳພາດ, ໃຫ້ທ່ານຂໍໃຫ້ຜູ້ສອນສາດສະໜາແບ່ງປັນນຳທ່ານເຖິງ:
  - ປະຈັກພະຍານຂອງເຂົາເຈົ້າກ່ຽວກັບພະເຢຊູຄຣິດ.
  - ປະຈັກພະຍານຂອງເຂົາເຈົ້າກ່ຽວກັບພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ ແລະພາລະກິດຂອງ ໂຈເຊັບ ສະມິດ.
  - ປະຈັກພະຍານຂອງເຂົາເຈົ້າກ່ຽວກັບພະຄຳພີມໍມອນ.
  - ຄວາມຄິດຂອງເຂົາເຈົ້າກ່ຽວກັບເປົ້າໝາຍຂອງເຂົາເຈົ້າໃນຖານະເປັນຜູ້ສອນສາດສະໜາ.
- ເຊື້ອເຊີນໃຫ້ຜູ້ສອນສາດສະໜາບັນທຶກຄວາມຮູ້ສຶກກ່ຽວກັບເປົ້າໝາຍຂອງລະຍະເປັນຜູ້ສອນສາດສະໜາໄວ້ໃນປຶ້ມບັນທຶກການສຶກສາ.
- ສິ່ງຈົດໝາຍສະແດງຄວາມຍິນດີໄປຫາສະມາຊິກໃໝ່.

ໝາຍເຫດ

ໝາຍເຫດ



# ເຮົາຈະສຶກສາໃຫ້ໄດ້ຜົນ ແລະ ຕຽມສອນດ້ວຍວິທີໃດ?

## ໃຫ້ພິຈາລະນາເລື່ອງນີ້

- ເປັນຫຍັງມັນຈຶ່ງສຳຄັນທີ່ຈະສຶກສາພະກິດຕິຄຸນ?
- ການສຶກສາຂອງເຮົາຈະເປັນຜົນສະທ້ອນຕໍ່ຜູ້ຄົນທີ່ເຮົາສອນແນວໃດ?
- ເປັນຫຍັງເຮົາຈຶ່ງຕ້ອງສະສົມຄຳສອນແຫ່ງພະກິດຕິຄຸນຂອງພະເຍຊູຄຣິດຕໍ່ໄປ?
- ເຮົາຈະຮຽນຮູ້ຄຳສອນແຫ່ງພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ຂອງພະເຍຊູຄຣິດໃຫ້ໄດ້ຜົນ ແລະ ຕຽມສອນຄົນອື່ນໆໄດ້ແນວໃດ?
- ເຮົາຈະປັບປຸງການສຶກສາສ່ວນຕົວ ແລະ ການສຶກສາກັບຄູ່ສອນສາດສະໜາຂອງເຮົາໄດ້ແນວໃດ?

ໝາຍເຫດ

ພະຜູ້ເປັນເຈົ້າໄດ້ກ່າວວ່າ ກ່ອນເຮົາສະແຫວງຫາເພື່ອປະກາດພະຄຳຂອງພະອົງ, ເຮົາຄວນສະແຫວງຫາໃຫ້ໄດ້ພະຄຳຂອງພະອົງກ່ອນ. ແລ້ວລີ້ນຂອງເຮົາຈະຖືກປ່ອຍ; ເມື່ອນັ້ນ, ຖ້າເຮົາປາດຖະໜາ, ເຮົາຈະມີພະວິນຍານຂອງພະອົງ ແລະ ພະຄຳຂອງພະອົງຈົນເຖິງເຮັດໃຫ້ມະນຸດແນ່ໃຈ (see D&C 11:21). ກ່ອນທ່ານຈະສອນໃຫ້ໄດ້ຜົນ, ທ່ານຕ້ອງມີຄວາມຮູ້ທາງວິນຍານເສຍກ່ອນ. ກ່ອນທ່ານຈະເຕີບ ໂຕໃນພະກິດຕິຄຸນ ແລະ ຢູ່ໃນເສັ້ນທາງທີ່ນຳໄປສູ່ຊີວິດນິລັນດອນ, ທ່ານຕ້ອງພັດທະນານິໄສກ່ຽວກັບການສຶກສາພະກິດຕິຄຸນເສຍກ່ອນ (see D&C 131:6). ນິໄສກ່ຽວກັບການສຶກສາທີ່ທ່ານໄດ້ພັດທະນາຕອນທ່ານເປັນຜູ້ສອນສາດສະໜາ ຈະໃຫ້ພອນສ່ວນຕົວແກ່ທ່ານ ແລະ ຊ່ອຍເຫລືອຄົນທີ່ທ່ານສອນໃຫ້ເຕີບ ໂຕໃນສັດທາຂອງເຂົາເຈົ້າໃນພະຜູ້ຊ່ອຍໃຫ້ລອດ.

ການສຶກສາປະຈຳວັນທີ່ໄດ້ຜົນຕ້ອງເລີ່ມຕົ້ນດ້ວຍການອະທິຖານສະເໝີ. ການສຶກສາເປັນການກະທຳດ້ວຍ ສັດທາ ທີ່ຕ້ອງໃຊ້ສິດທິການເລືອກສ່ວນຕົວ. ຜູ້ສອນສາດສະໜາຫລາຍຄົນດີ້ນລົນເພື່ອຈະຮູ້ວິທີທີ່ຈະສຶກສາໃຫ້ໄດ້ຜົນ. ບາງຄົນເພິ່ງພາຄົນອື່ນໆຢ່າງໜັກ ຫລື ເພິ່ງພາໃນໂຄງຮ່າງວິທີຮຽນເພື່ອໃຫ້ບອກເຂົາເຈົ້າເຖິງສິ່ງທີ່ຕ້ອງສຶກສາ ແລະ ວິທີທີ່ຈະສຶກສາ. ເຖິງແມ່ນການຮຽນຮູ້ຈາກຄູທີ່ດີເປັນສິ່ງທີ່ສຳຄັນ, ແຕ່ວ່າມັນສຳຄັນຫລາຍກວ່າທີ່ທ່ານຈະມີປະສົບການໃນການຮຽນຮູ້ທີ່ມີຄວາມໝາຍດ້ວຍຕົວຂອງທ່ານເອງ. ຜົນດີຈາກການສຶກສາຕ້ອງອາໄສຄວາມປາດຖະໜາທີ່ຢາກຮຽນຮູ້ແທ້ໆຂອງທ່ານ, ສຶກສາດ້ວຍ "ຄວາມຕັ້ງໃຈຢ່າງແທ້ຈິງ" (ໂມໂລໄນ 10:4), "ຢາກປະຕິບັດຕາມພະເຈົ້າປະສົງ" (ມັດທາຍ 5:6), ແລະ ຄົ້ນຫາຄຳຕອບຕໍ່ຄຳຖາມ ແລະ ບັນຫາທີ່ຜູ້ສົນໃຈຂອງທ່ານມີ.

ໝາຍເຫດ

### ກິດຈະກຳ: ການສຶກສາສ່ວນຕົວ

ໃຫ້ເບິ່ງຮູບ ໂຢເຊັບ ສະມິດ ຢູ່ໜ້າກ່ອນ. ອ່ານ *Joseph Smith—History* 1:11–13. ແລ້ວຕອບຄຳຖາມດັ່ງຕໍ່ໄປນີ້ ໃນປຶ້ມບັນທຶກການສຶກສາຂອງທ່ານ.

- ການອ່ານ ແລະ ການໄຕ່ຕອງກ່ຽວກັບ ຢາໂກໂບ 1:5 ຂອງ ໂຢເຊັບ ສະມິດ ນຳໄປສູ່ການເປີດເຜີຍແນວໃດ?
- ການສຶກສາຂອງເພິ່ນມີອິດທິພົນແນວໃດຕໍ່ຄົນລຸ້ນຕໍ່ໄປໃນອານາຄົດ?
- ການຕັດສິນໃຈທີ່ຈະສຶກສາ ແລະ ສະແຫວງຫາຂອງເພິ່ນມີຜົນສະທ້ອນແນວໃດຕໍ່ຊີວິດຂອງທ່ານ?
- ການສຶກສາພະກິດຕິຄຸນຂອງທ່ານມີອິດທິພົນແນວໃດຕໍ່ຊີວິດຂອງທ່ານ?

### ການສຶກສາພະຄຳພີ

**ພະຜູ້ເປັນເຈົ້າຢາກໃຫ້ເຮົາສຶກສາພະກິດຕິຄຸນດ້ວຍວິທີໃດ?**

| | | |
|---|---|---|
| 2 ນີໄຟ 4:15–16 | D&C 58:26–28 | D&C 88:118 |
| 2 ນີໄຟ 32:3 | | |

## ການຮຽນຮູ້ໂດຍພະວິນຍານບໍລິສຸດ



ການສຶກສາຂອງທ່ານກ່ຽວກັບພະກິດຕິຄຸນຈະໄດ້ຜົນຫລາຍທີ່ສຸດເມື່ອທ່ານໄດ້ຖືກສອນໂດຍພະວິນຍານບໍລິສຸດ. ທ່ານຄວນອະທິຖານເປັນປະຈຳກ່ອນເລີ່ມຕົ້ນການສຶກສາຂອງທ່ານກ່ຽວກັບພະກິດຕິຄຸນ ເພື່ອພະວິນຍານບໍລິສຸດຈະຊ່ອຍເຫລືອທ່ານໃຫ້ຮຽນຮູ້. ພະອົງຈະນຳຄວາມຮູ້ ແລະ ຄວາມເຊື່ອໝັ້ນທີ່ຈະໃຫ້ພອນແກ່ຊີວິດຂອງທ່ານ ແລະ ປ່ອຍໃຫ້ທ່ານໃຫ້ພອນແກ່ຊີວິດຂອງຄົນອື່ນໆ. ສັດທາຂອງທ່ານໃນພະເຢຊູຄຣິດຈະເພີ່ມຂຶ້ນ. ຄວາມປາດຖະໜາຂອງທ່ານທີ່ຈະກັບໃຈ ແລະ ເຮັດໃຫ້ດີກວ່າເກົ່າຈະເຕີບໂຕຂຶ້ນ.

ການສຶກສາແບບນີ້ຕຽມທ່ານເພື່ອການຮັບໃຊ້, ໃຫ້ຄວາມປອບໂຍນ, ແກ້ໄຂບັນຫາ, ແລະ ໃຫ້ພະລັງຕໍ່ທ່ານເພື່ອຈະອົດທົນຈົນເຖິງທີ່ສຸດ. ການສຶກສາພະກິດຕິຄຸນທີ່ໄດ້ຮັບຜົນສຳເລັດຕ້ອງມີຄວາມປາດຖະໜາ ແລະ ດ້ວຍການກະທຳ. ຜູ້ທີ່ສະແຫວງຫາຢ່າງພາກພຽນຈະພົບ; ແລະ ຄວາມລຶກລັບຂອງພະເຈົ້າຈະເປີດຕໍ່ເຂົາ ໂດຍອຳນາດຂອງພະວິນຍານບໍລິສຸດ ໃນສະໄໝນີ້ຄືກັນກັບສະໄໝໂບຮານ (see 1 Nephi 10:19). ຄືກັນກັບ ອີນັດ, ເມື່ອທ່ານຫິວທີ່ຈະຢາກຮູ້ຄຳແຫ່ງຊີວິດນິລັນດອນ ແລະ ເມື່ອທ່ານຍອມໃຫ້ຄຳເຫລົ່ານີ້ "ຝັງເລິກຢູ່ໃນໃຈ [ຂອງທ່ານ]" (ອີນັດ 1:3), ພະວິນຍານບໍລິສຸດຈະເປີດສະໝອງ ແລະ ຫົວໃຈຂອງທ່ານສູ່ແສງສະຫວ່າງ ແລະ ຄວາມເຂົ້າໃຈເພີ່ມເຕີມ.

ອີກຢ່າງໜຶ່ງ ການຮຽນຮູ້ພະກິດຕິຄຸນແມ່ນຂັ້ນຕອນຂອງການໄດ້ຮັບການເປີດເຜີຍ (see Jacob 4:8). ພະຜູ້ເປັນເຈົ້າໄດ້ກ່າວຕໍ່ ອໍລິເວີ ຄາວເດີລີ ວ່າ ອໍລິເວີບໍ່ເຂົ້າໃຈ; ລາວຄິດເອົາວ່າພະຜູ້ເປັນເຈົ້າຈະມອບຄວາມສາມາດນັ້ນໃຫ້ລາວ ແຕ່ລາວບໍ່ໄດ້ໃຊ້ຄວາມຄິດ ກ່ອນທູນຂໍໃຫ້ພະອົງຊ່ອຍເຫລືອ. ພະຜູ້ເປັນເຈົ້າໄດ້ກ່າວກັບ ອໍລິເວີ ວ່າລາວຕ້ອງສຶກສາໄຕ່ຕອງໃນຄວາມຄິດຂອງລາວກ່ອນ ແລ້ວຈຶ່ງຖາມພະອົງວ່າ ມັນຖືກຕ້ອງຫລືບໍ່. ຖ້າມັນຖືກຕ້ອງ ພະອົງຈະເຮັດໃຫ້ຊວງອົກຂອງລາວຮ້ອນໄໝ້ຢູ່ພາຍໃນ; ດັ່ງນັ້ນ, ລາວຈະຮູ້ສຶກວ່າ ມັນຖືກຕ້ອງ (see D&C 9:7–8). ເມື່ອທ່ານສຶກສາ ໃຫ້ສັງເກດເບິ່ງຢ່າງດີເຖິງແນວຄິດທີ່ມາສູ່ສະໝອງ ແລະ ຄວາມຮູ້ສຶກທີ່ມາສູ່ຈິດໃຈຂອງທ່ານ, ໂດຍສະເພາະ ແມ່ນແນວຄິດ ແລະ ຄວາມຮູ້ສຶກກ່ຽວກັບຄົນທີ່ທ່ານກຳລັງສອນ.

ໝາຍເຫດ

**ການສຶກສາພະຄຳພີ**

**ພະວິນຍານບໍລິສຸດມີບົດບາດແນວໃດໃນການຊ່ອຍເຫລືອເຮົາໃຫ້ຮຽນຮູ້ພະກິດຕິຄຸນ?**

| | | |
|---|---|---|
| 2 ນີໄຟ 32:5 | D&C 11:12–14 | ໂຢຮັນ 16:13 |
| ແອລະມາ 5:45–46 | D&C 39:5–6 | 1 ໂກລິນໂທ 2:9–14 |
| ໂມໂລໄນ 10:5 | ໂຢຮັນ 14:26 | |

## ໃຫ້ດຳລົງຊີວິດຕາມສິ່ງທີ່ທ່ານຮຽນຮູ້

ເມື່ອທ່ານຮູ້ສຶກເຖິງຄວາມປິຕິຍິນດີທີ່ມາຈາກການເຂົ້າໃຈພະກິດຕິຄຸນ, ທ່ານຈະຢາກໃຊ້ສິ່ງທີ່ທ່ານຮຽນຮູ້. ພະຍາຍາມດຳລົງຊີວິດໃຫ້ສອດຄ່ອງກັບສິ່ງທີ່ທ່ານເຂົ້າໃຈ. ເມື່ອເຮັດແບບນັ້ນ ສັດທາ, ຄວາມຮູ້, ແລະ ປະຈັກພະຍານຂອງທ່ານຈະເຂັ້ມແຂງຂຶ້ນ. ການປະຕິບັດຕາມສິ່ງທີ່ທ່ານໄດ້ຮຽນມາ ຈະນຳຄວາມເຂົ້າໃຈເພີ່ມເຕີມ ແລະ ຄວາມອິນທິບມາສູ່ທ່ານ (ເບິ່ງ ໂຢຮັນ 7:17).

ເມື່ອທ່ານສະສົມຄຳຂອງພະຄຳພີ ແລະ ຄຳຂອງສາດສະດາຍຸກສຸດທ້າຍ ໂດຍການສຶກສາ ແລະ ສັດທາ, ຄວາມປາດຖະໜາທີ່ຈະແບ່ງປັນພະກິດຕິຄຸນຂອງທ່ານຈະເພີ່ມຂຶ້ນ. ທ່ານໄດ້ຖືກສັນຍາວ່າ ພະວິນຍານຈະຊ່ອຍເຫລືອທ່ານໃຫ້ຮູ້ສິ່ງທີ່ຈະເວົ້າເວລາທີ່ທ່ານສອນ. ພະຜູ້ເປັນເຈົ້າໄດ້ກ່າວວ່າ ເມື່ອເຮົາສະສົມຄຳຂອງຊີວິດ ໃນຈິດໃຈຂອງເຮົາຕະຫລອດໄປ, ພະຜູ້ເປັນເຈົ້າຈະປະທານສ່ວນໜຶ່ງຂອງພະຄຳຂອງພະອົງໃຫ້ ໃນຊົ່ວໂມງທີ່ເຮົາຕ້ອງການ. (see D&C 84:85).

> *"ເມື່ອເຮົາເຂົ້າໃຈຄຳສອນທີ່ແທ້ຈິງ, ຄວາມນຶກຄິດ ແລະ ການປະພຶດຂອງເຮົາຈະປ່ຽນແປງ. ການສຶກສາກ່ຽວກັບຄຳສອນແຫ່ງພະກິດຕິຄຸນຈະປັບປຸງການປະພຶດໄວກວ່າການສຶກສາກ່ຽວກັບການປະພຶດ ເພື່ອປັບປຸງການປະພຶດ."*
>
> – ປະທານ ບອຍ ເຄ ແພັກເກີ
>
> "LITTLE CHILDREN," *ENSIGN*, NOV. 1986, 17

**ການສຶກສາພະຄຳພີ**

**ພະຄຳພີສອນຫຍັງແດ່ກ່ຽວກັບການຮຽນຮູ້ພະກິດຕິຄຸນ?**

| | | |
|---|---|---|
| 1 Nephi 10:17–19 | D&C 50:19–22 | D&C 88:118 |
| D&C 11:21–22 | | |

## ການສຶກສາ ແລະ ການຕຽມສອນບົດຮຽນ

ບົດຮຽນທັງໝົດ (ທີ່ມີຢູ່ໃນບົດທີ 3) ມີຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ, ຄຳໝັ້ນສັນຍາ, ແລະ ຄຳສອນທີ່ທ່ານຄວນສອນ. ໃນບົດຮຽນທັງໝົດ ທ່ານຈະເຫັນແນວຄິດທີ່ເປັນປະໂຫຍດສຳລັບການສອນ. ແຕ່ວ່າ, ບົດຮຽນບໍ່ໄດ້ບອກທ່ານເຖິງທຸກສິ່ງທີ່ທ່ານຈະເວົ້າ—ຫລື ວິທີທີ່ຈະເວົ້າ. ແຕ່ທ່ານເປັນຜູ້ຮັບຜິດຊອບ ທີ່ຈະເຂົ້າໃຈບົດຮຽນທັງໝົດຢ່າງລະອຽດ ແລະ ສອນໂດຍພະວິນຍານດ້ວຍຄຳເວົ້າຂອງທ່ານເອງ. ຈົ່ງສອນ ເພື່ອຄົນອື່ນໆຈະມີສັດທາເຂັ້ມແຂງຂຶ້ນໃນພະເຢຊູຄຣິດ, ມີຄວາມປາດຖະໜາທີ່ຈະກັບໃຈ, ແລະ ເຂົ້າສູ່ພັນທະສັນຍານຳພະເຈົ້າ.

ຄູທີ່ໄດ້ຮັບຜົນສຳເລັດ ຈະພະຍາຍາມປັບປຸງຄວາມຮູ້ ແລະ ຄວາມສາມາດຂອງເຂົາເຈົ້າເປັນປະຈຳ. ເຖິງແມ່ນວ່າ ທ່ານຈະບໍ່ສອນສິ່ງທັງໝົດທີ່ທ່ານຮູ້ກ່ຽວກັບຄຳສອນ, ແຕ່ຄວາມຮູ້ທີ່ເພີ່ມພູນຂອງທ່ານຈະສ້າງປະຈັກພະຍານຂອງທ່ານ ແລະ ຄວາມສາມາດຂອງທ່ານ ທີ່ຈະສອນດ້ວຍອຳນາດຂອງພະວິນຍານ. ທ່ານຈະຮູ້ວ່າ ທ່ານໄດ້ໃຊ້ບົດຮຽນດ້ວຍຄວາມຕັ້ງໃຈເມື່ອທ່ານ:

- ສະແຫວງຫາ ແລະ ເຮັດຕາມພະວິນຍານຕອນທ່ານຕຽມພ້ອມ ແລະ ສອນບົດຮຽນ.

ໝາຍເຫດ

- ພະຍາຍາມສຶກສາຢ່າງສະໝ່ຳສະເໝີ, ສະສົມ, ແລະ ໃຊ້ຄຳສອນໃນຊີວິດຂອງທ່ານ.
- ເຮັດວຽກນຳຄູ່ສອນສາດສະໜາຂອງທ່ານເພື່ອວາງແຜນສະເພາະສຳລັບແຕ່ລະຄົນ ທີ່ທ່ານສອນ.
- ເຈາະຈົງຢູ່ທີ່ຈຸດໃຈກາງຂອງຂ່າວສານ ແລະ ຄຳສອນເມື່ອທ່ານສອນ.
- ດັດແປງລຳດັບ, ຄວາມຍາວ, ແລະ ຄວາມໄວຫລືຊ້າຂອງບົດຮຽນ ເພື່ອຕອບສະໜອງຄວາມຕ້ອງການຂອງຄົນທີ່ທ່ານສອນ.
- ສອນຈາກພະຄຳພີດ້ວຍຄວາມແຈ່ມແຈ້ງ ແລະ ດ້ວຍຄວາມເຊື່ອໝັ້ນເປັນປະຈຳ.
- ສະແດງປະຈັກພະຍານເລື້ອຍໆ.
- ຊ່ອຍເຫລືອຄົນອື່ນໆໃຫ້ເຮັດ ແລະ ຮັກສາຄຳໝັ້ນສັນຍາທີ່ຈະນຳໄປສູ່ການຮັບບັບຕິດສະມາ ແລະ ການຢືນຢັນ.

ໂດຍເຮັດສິ່ງເຫລົ່ານີ້ ທ່ານຈະສາມາດຊ່ອຍເຫລືອຄົນອື່ນໆໃຫ້ໄດ້ຮັບປະຈັກພະຍານຂອງພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ຂອງພະເຢຊູຄຣິດ.

ເມື່ອທ່ານເລີ່ມຮັບໃຊ້ເປັນຜູ້ສອນສາດສະໜາ, ທ່ານຈຳເປັນຕ້ອງຮຽນຮູ້ກ່ຽວກັບເລື່ອງການຟື້ນຟູພະກິດຕິຄຸນ ແລະ ຕ້ອງຮູ້ວິທີການສອນທີ່ຈຳເປັນ. ເມື່ອທ່ານມີປະສົບການເພີ່ມຂຶ້ນ, ທ່ານຄວນເຮັດໃຫ້ ຄວາມຮູ້ຂອງທ່ານເລິກຊຶ້ງຂຶ້ນ ແລະ ພັດທະນາຄວາມສາມາດໃນການສອນຂອງທ່ານໃຫ້ດີຂຶ້ນ. ເມື່ອທ່ານຕຽມພ້ອມເພື່ອໄປສອນຕາມນັດ, ທ່ານຕ້ອງມີແຜນຂອງບົດຮຽນທີ່ຈະສາມາດເຮັດໃຫ້ທ່ານສອນໂດຍພະວິນຍານ ແລະ ຊ່ອຍເຫລືອຄົນອື່ນໆໃຫ້ເຮັດ ແລະ ຮັກສາຄຳໝັ້ນສັນຍາ. ໂຄງຮ່າງຂ້າງລຸ່ມນີ້ແມ່ນຄຳແນະນຳທີ່ທ່ານສາມາດໃຊ້ຕະຫລອດລະຍະ ທີ່ທ່ານເປັນຜູ້ສອນສາດສະໜາ. ແຕ່ວ່າ, ບໍ່ໃຫ້ຄິດວ່າທ່ານຕ້ອງໃຊ້ທຸກໆໂຄງຮ່າງ ໃນທຸກໆສະພາບການ. ແຕ່ໃຫ້ໃຊ້ໂຄງຮ່າງເຫລົ່ານີ້ ເພື່ອຊ່ອຍເຫລືອໃນຄວາມຕ້ອງການຂອງທ່ານ ແລະ ເມື່ອທ່ານຖືກນຳພາໂດຍພະວິນຍານເທົ່ານັ້ນ. ຖ້າທ່ານຮຽນພາສາອື່ນ, ໃຫ້ໃຊ້ໂຄງຮ່າງເຫລົ່ານີ້ໃນພາສາເດີມຂອງທ່ານກ່ອນ ແລະ ຫລັງຈາກນັ້ນ ໃຫ້ໃຊ້ໃນພາສາທີ່ທ່ານຮຽນສຳລັບວຽກງານເຜີຍແຜ່ຂອງທ່ານ.

- **ຕັ້ງໃຈໃສ່ຕໍ່ຄຳໝັ້ນສັນຍາ ແລະ ຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ.** ໃຫ້ສອນ ເພື່ອວ່າຜູ້ຄົນຈະເຮັດຄຳໝັ້ນສັນຍາ ແລະ ຕຽມພ້ອມເພື່ອຮັບບັບຕິດສະມາ ແລະ ຮັບການຢືນຢັນ. ໃຫ້ເຂົ້າໃຈຄຳຖາມສຳລັບ ການສຳພາດກ່ອນບັບຕິດສະມາ ແລະ ຄຳໝັ້ນສັນຍາ ສຳລັບບົດຮຽນແຕ່ລະບົດ. ຮຽນຮູ້ສິ່ງທີ່ຄົນອື່ນຄວນຮູ້, ຄວນຮູ້ສຶກ, ແລະ ຄວນເຮັດ ເພາະການສອນຂອງທ່ານນັ້ນ. ໃຫ້ຊ່ອຍຄູ່ສອນສາດສະໜາຂອງທ່ານເພື່ອ ອະທິບາຍຫລັກທຳເຫລົ່ານີ້ໃນຄຳເວົ້າຂອງທ່ານເອງຢ່າງແຈ່ມແຈ້ງ ແລະ ດ້ວຍອຳນາດ.

- **ຮຽນຮູ້ ແລະ ນຳໃຊ້ຄຳສອນ.** ຄຳສອນເປັນພື້ນຖານຂອງບົດຮຽນ. ໃຫ້ສຶກສາພະຄຳພີ, ບົດຮຽນ, ປຶ້ມນ້ອຍຊື່ວ່າ, "ແນວຄິດສຳລັບການສອນ" ແລະ ອຸບປະກອນສຳລັບຜູ້ສອນສາດສະໜາ ເພື່ອຈະໄດ້ເຂົ້າໃຈຄັກແນ່ກ່ຽວກັບຄຳສອນ. ໃຫ້ຄົ້ນຫາຂໍ້ມູນທີ່ສົ່ງເສີມຄຳສອນຂອງບົດຮຽນ. ໃຫ້ຕັ້ງໃຈຈື່ຈຳຂັ້ນຕອນຂອງຫລັກທຳຄຳສອນ. ໃຫ້ນຳໃຊ້ສິ່ງທີ່ທ່ານໄດ້ຮຽນມານັ້ນ. ໃຫ້ບັນທຶກສິ່ງທີ່ທ່ານຮຽນໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ. ໃຫ້ແບ່ງປັນສິ່ງທີ່ທ່ານໄດ້ຮຽນຮູ້ນຳຜູ້ສອນສາດສະໜາຄົນອື່ນໆ.



- **ຈັດສິ່ງທີ່ທ່ານຈະສອນ ແລະ ສະຫລຸບໃຫ້ເປັນລະບຽບ.** ໃນການຕຽມພ້ອມທີ່ຈະສອນຄຳສອນໃຫ້ແຈ່ມແຈ້ງ ແລະ ດ້ວຍອຳນາດທາງວິນຍານ, ທ່ານຕ້ອງຈັດສິ່ງທີ່ທ່ານຈະສອນ ແລະ ສະຫລຸບໃນແຜນບົດຮຽນໃຫ້ເປັນລະບຽບ. ເຈາະຈົງຢູ່ທີ່ຄຳສອນ, ຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ, ແລະ ຄຳໝັ້ນສັນຍາ ທີ່ມີຢູ່ໃນບົດຮຽນ. ເຮັດໃຫ້ແຜນບົດຮຽນດີຂຶ້ນດ້ວຍການໃຊ້ພະຄຳພີ, ຄຳຖາມ, ແລະ ຕົວຢ່າງ. ສິ່ງເຫລົ່ານີ້ ຕ້ອງແຕກຕ່າງກັນຕາມຄວາມຍາວຂອງການນັດສອນຂອງທ່ານ. ທ່ານບໍ່ຄວນສ້າງແຜນບົດຮຽນໃໝ່ ອີກຕ່າງຫາກ ສຳລັບຜູ້ສົນໃຈແຕ່ລະຄົນ, ແຕ່ທ່ານຄວນເຮັດໃຫ້ແຜນບົດຮຽນດີຂຶ້ນຕໍ່ໄປ ແລະ ດັດແປງ

ໝາຍເຫດ

ບົດຮຽນເຫລົ່ານີ້ໃຫ້ເໝາະສົມກັບຄວາມຕ້ອງການຂອງຄົນທີ່ທ່ານສອນ. ເມື່ອທ່ານວາງແຜນບົດຮຽນຄັ້ງທຳອິດ, ພະຍາຍາມເຮັດໃຫ້ບົດຮຽນນັ້ນງ່າຍ ແລະ ສັ້ນ. ເມື່ອທ່ານມີປະສົບການເພີ່ມຂຶ້ນ, ແລ້ວຈຶ່ງວາງແຜນບົດຮຽນຂອງທ່ານໃຫ້ດີຂຶ້ນກວ່າເກົ່າ.

- **ຕັ້ງໃຈໃສ່ຕໍ່ຄວາມຕ້ອງການ.** ຂະນະທີ່ຄຳສອນຂອງພະກິດຕິຄຸນໃຊ້ໄດ້ສຳລັບທຸກໆຄົນ, ທ່ານຄວນດັດແປງວິທີການສອນເພື່ອໃຫ້ເໝາະສົມກັບຄວາມຕ້ອງການຂອງຄົນທີ່ທ່ານສອນ. ເມື່ອທ່ານສຶກສາຄຳສອນ ແລະ ສ້າງແຜນບົດຮຽນ, ໃຫ້ຈຳແນກບ່ອນທີ່ທ່ານຈະດັດແປງເພື່ອຕອບສະໜອງຄວາມຕ້ອງການທີ່ສຳຄັນ. ທົບທວນ ແລະ ເຮັດໃຫ້ສິ່ງທີ່ດັດແປງເຫລົ່ານີ້ດີຂຶ້ນເມື່ອທ່ານຕຽມພ້ອມສຳລັບການນັດແຕ່ລະເທື່ອໂດຍສະເພາະ. ເຂົ້າໃຈກ່ຽວກັບຄຳເຊື້ອເຊີນທີ່ທ່ານຈະສະເໜີ. ຕັ້ງໃຈໃສ່ເປົ້າໝາຍສຸດທ້າຍໃນການຊ່ອຍເຫລືອຄົນທີ່ທ່ານສອນໃຫ້ໄດ້ຮັບ ພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ຂອງພະເຢຊູຄິດຜ່ານການຮັບບັບຕິດສະມາ ແລະ ການຢືນຢັນ.

- **ຕຽມຕອບຄຳຖາມ.** ໃນຖານະເປັນຜູ້ສອນສາດສະໜາ, ທ່ານຈະໄດ້ຍິນຄຳຖາມຫລາຍຂໍ້. ໃຫ້ບັນທຶກຄຳຖາມເຫລົ່ານີ້ໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ. ຄົ້ນຄວ້າພະຄຳພີ ແລະ ອຸບປະກອນອື່ນໆເພື່ອຫາຄຳຕອບ. ອະທິຖານເພື່ອຈະໄດ້ຄວາມເຂົ້າໃຈ. ບັນທຶກຄຳຕອບໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ. ທົບທວນສິ່ງທີ່ທ່ານຮູ້ຈັກກັບຜູ້ສອນສາດສະໜາຄົນອື່ນໆ. ເພີ່ມຄຳຖາມທີ່ຖາມເປັນປະຈຳ ແລະ ຄຳຕອບໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານເພື່ອເປັນຂໍ້ອ້າງອີງ.

- **ສອນບົດຮຽນ.** ການສອນເປັນໂອກາດທີ່ມີພະລັງເພື່ອຈະປັບປຸງຄວາມຮູ້ ແລະ ຄວາມສາມາດຂອງທ່ານ. ເມື່ອທ່ານຮຽນຮູ້ຄຳສອນ ແລະ ຈັດແຜນບົດຮຽນ, ໃຫ້ສອນຄູ່ສອນສາດສະໜາຂອງທ່ານ ແລະ ຜູ້ສອນ ສາດສະໜາຄົນອື່ນໆ. ທົດລອງຄຳອະທິບາຍໃໝ່, ວິທີສອນໃໝ່, ປະສົບການໃໝ່, ຄຳຖາມໃໝ່ ແລະ ວິທີທາງໃໝ່ ເພື່ອເຊື້ອເຊີນຄົນອື່ນໃຫ້ເຮັດຄຳໝັ້ນສັນຍາ. ຖາມຫາແນວຄິດ ແລະ ຄຳແນະນຳກ່ຽວກັບການສອນ.

- **ປະເມີນການສອນຂອງທ່ານ.** ຫລັງຈາກທຸກໆສະພາບການຂອງການສອນ, ໃຫ້ປະເມີນເບິ່ງວ່າ ທ່ານເຮັດໄດ້ດີປານໃດ. ທ່ານໄດ້ເຈາະຈົງຢູ່ທີ່ຄຳສອນບໍ? ທ່ານໄດ້ເຊື້ອເຊີນຜູ້ສົນໃຈໃຫ້ກັບໃຈ ແລະ ເຮັດ ແລະ ຮັກສາຄຳໝັ້ນສັນຍາບໍ? ທ່ານໄດ້ພະຍາຍາມທີ່ຈະຕຽມຜູ້ສົນໃຈສຳລັບການຮັບບັບຕິດສະມາ ແລະ ຮັບການຢືນຢັນບໍ? ທ່ານໄດ້ໃຊ້ຄຳຖາມທີ່ມີຜົນບໍ? ທ່ານໄດ້ແບ່ງປັນປະຈັກພະຍານບໍ? ທ່ານໄດ້ຖາມຜູ້ສົນໃຈວ່າມີຄົນອື່ນທີ່ຢາກໃຫ້ໄປສອນບໍ? ໃຫ້ດັດແປງແຜນບົດຮຽນເມື່ອທ່ານຮູ້ຫລາຍຂຶ້ນ.

ເມື່ອທ່ານຮຽນຮູ້ບົດຮຽນທັງຫລາຍ, ໃຫ້ສະແຫວງຫາຄວາມຮູ້ຢ່າງເລິກຊຶ້ງກ່ຽວກັບຄຳສອນຕໍ່ໄປ. ພະຍາຍາມ ຢ່າງບໍ່ຢຸດຢັ້ງເພື່ອຈະສອນດ້ວຍອຳນາດໃຫ້ຫລາຍຂຶ້ນ. ເມື່ອທ່ານສຶກສາດ້ວຍການອະທິຖານ ແລະ ສັດທາ, ຄວາມຮູ້ ແລະ ປະຈັກພະຍານຂອງທ່ານຈະເຕີບໂຕຂຶ້ນ. ແຕ່ວ່າ, ຫ້າມພະຍາຍາມສອນທຸກສິ່ງທີ່ທ່ານຮູ້. ໃຫ້ສອນຂ່າວສານຢ່າງແຈ່ມແຈ້ງ, ຢ່າງງ່າຍໆ, ແລະ ຕາມຄວາມຕ້ອງການຂອງແຕ່ລະຄົນ, ເຮັດຕາມພະວິນຍານເພື່ອສອນ ພາກສ່ວນເຫລົ່ານັ້ນທີ່ຈະແຈກຢາຍໃຫ້ແກ່ທຸກຄົນ (see D&C 84:85).

## ການແປຄວາມໝາຍຄຳສັບຕ່າງໆ

ຜູ້ສອນສາດສະໜາທັງຫລາຍມີຂ່າວສານທີ່ມີພະລັງພ້ອມດ້ວຍຄຳສັບທີ່ພິເສດ. ຄືກັນກັບຄຳທີ່ທ່ານໝໍເວົ້າຢູ່ໃນຫ້ອງນັ່ງຖ້າຢູ່ໂຮງໝໍ ຈະແຕກຕ່າງກັບຄຳທີ່ເພິ່ນເວົ້າຢູ່ໃນຫ້ອງຜ່າຕັດ, ສະນັ້ນ ທ່ານຕ້ອງຮຽນຮູ້ທີ່ຈະເວົ້າ ເພື່ອວ່າຜູ້ທີ່ບໍ່ຮູ້ເຄີຍໄດ້ຍິນຂ່າວສານຂອງເຮົາມາກ່ອນ ຈະສາມາດເຂົ້າໃຈສິ່ງທີ່ທ່ານສອນໄດ້.

ເພື່ອຊ່ອຍເຫລືອຄົນອື່ນໆໃຫ້ເຂົ້າໃຈຄຳທີ່ເຂົາເຈົ້າບໍ່ຮູ້, ໃຫ້ສຶກສາຄຳສັບຢູ່ກ້ອງຫົວຂໍ້ ການອະທິບາຍຄຳສັບທີ່ສຳຄັນ ແລະ ຄຳສັບຢູ່ໃນພາກ "ແນວຄິດສຳລັບການສອນ" ໃນ ແຕ່ລະບົດຮຽນ. ໃຫ້ຮູ້ຈັກຄວາມໝາຍທີ່ໄດ້ຈັດໄວ້ໃຫ້ເປັນຢ່າງດີ. ໃຊ້ *True to the Faith* ແລະ Guide to the Scriptures ເພື່ອຊອກຫາຄວາມໝາຍສຳລັບຄຳສັບ ອື່ນໆ. ຂຽນຄວາມໝາຍເຫລົ່ານີ້ລົງໃນປຶ້ມບັນທຶກການສຶກສາຂອງທ່ານ. ແບ່ງປັນຄວາມໝາຍເຫລົ່ານີ້ນຳຄູ່ ສອນສາດສະໜາຂອງທ່ານ ແລະ ຄົນອື່ນໆເພື່ອເບິ່ງວ່າທ່ານເຂົ້າໃຈຢ່າງຖືກຕ້ອງຫລືບໍ່. ຖ້າຄວາມໝາຍບໍ່ແຈ່ມແຈ້ງຕໍ່ຜູ້ອື່ນໆ, ໃຫ້ດັດແປງຄວາມໝາຍຂອງທ່ານຕາມອຸບປະກອນທີ່ທ່ານໄດ້ສຶກສາມາ.

ເມື່ອທ່ານສອນ, ໃຫ້ຄົ້ນຫາເພື່ອຈະໄດ້ຮູ້ວ່າຄຳສັບນີ້ ຫລື ຫລັກທຳນີ້ໃໝ່ຕໍ່ຄົນທີ່ທ່ານສອນຫລືບໍ່. ໃຫ້ໃຊ້ເວລາເພື່ອອະທິບາຍຄຳສັບ ຫລື ຫລັກທຳທີ່ເຂົາເຈົ້າບໍ່ຮູ້ຈັກ. ໃຫ້ຈື່ຈຳວ່າ ທ່ານສອນເພື່ອຄວາມເຂົ້າໃຈ ເພື່ອວ່າທ່ານ ແລະ ຜູ້ທີ່ທ່ານສອນຈະໄດ້ຮ່ຳຮຽນ ແລະ ຊື່ນຊົມນຳກັນ (see D&C 50:22).

ໝາຍເຫດ

### ກິດຈະກຳ: ການສຶກສາສ່ວນຕົວ

ເບິ່ງບົດຮຽນ "ຂ່າວສານຂອງການຟື້ນຟູພະກິດຕິຄຸນຂອງພະເຢຊູຄຣິດ" ຢູ່ໃນບົດທີ 3. ອ່ານ ຄຳສັບໃນກ້ອງຫົວຂໍ້ ການອະທິບາຍຄຳສັບທີ່ສຳຄັນໃນສ່ວນ "ແນວຄິດສຳລັບການສອນ." ຊອກຫາຄຳສັບອີກສາມຄຳໃນບົດຮຽນ ທີ່ທ່ານຢາກແປຄວາມໝາຍ. ເຮັດຕາມຄຳແນະນຳທີ່ໃຫ້ໄວ້ຂ້າງເທິງນີ້ໃນການສ້າງຄວາມໝາຍຂອງແຕ່ລະຄຳ.

## ແນວຄິດ ແລະ ຄຳແນະນຳສຳລັບການສຶກສາ

ແນວຄິດ ແລະ ຄຳແນະນຳແຕ່ລະຢ່າງໃນພາກນີ້ ສາມາດເຮັດໃຫ້ເວລາການສຶກສາຂອງທ່ານໄດ້ຮັບຜົນຫລາຍຂຶ້ນ ແລະ ເຊີດຊູທາງວິນຍານ. ເມື່ອທ່ານວາງແຜນການສຶກສາ ໃຫ້ພິຈາລະນາຄຳແນະນຳດັ່ງຕໍ່ໄປນີ້:

- ເລີ່ມຕົ້ນດ້ວຍການອະທິຖານເປັນປະຈຳ.
- ວາງແຜນສຳລັບກິດຈະກຳຂອງການສຶກສາທີ່ຈະສ້າງສັດທາຂອງທ່ານໃນພະຜູ້ຊ່ອຍໃຫ້ລອດ ແລະ ໃຊ້ເວລາຂອງທ່ານໃຫ້ເປັນປະໂຫຍດ.
- ວາງແຜນການສຶກສາຕາມຄວາມຕ້ອງການຂອງຜູ້ສົນໃຈ ແລະ ຕຽມເຂົາເຈົ້າເພື່ອຮັບບັບຕິດສະມາ, ຮັບການຢືນຢັນ, ແລະ ອົດທົນຈົນເຖິງທີ່ສຸດ. ຂຽນແຜນການສຶກສາຂອງທ່ານໄວ້ໃນ *ໜັງສືວາງແຜນປະຈຳວັນ* ຂອງທ່ານ
- ວາງແຜນການສຶກສາໂດຍຖາມຕົວເອງວ່າ: ເຮົາຈະສອນຫຍັງໃນວັນນີ້? ເຮົາຈະວາງແຜນການສຶກສາ ແນວໃດເພື່ອຊ່ອຍເຫລືອຜູ້ທີ່ເຮົາສອນໄດ້ດີທີ່ສຸດ? ເຮົາຈະໃຊ້ແນວຄິດ ແລະ ຄຳແນະນຳອັນໃດແດ່ຈາກພາກນີ້ ໃນການສຶກສາຂອງເຮົາ?

ເມື່ອທ່ານວາງແຜນກິດຈະກຳຂອງການສຶກສາ, ໃຫ້ທົດລອງແນວຄິດ ແລະ ຄຳແນະນຳບາງຢ່າງ ທີ່ໄດ້ບອກໄວ້ ຫລື ແນວຄິດທີ່ທ່ານຮຽນຮູ້ຈາກຄົນອື່ນໆ.

## ນຳໃຊ້ ແລະ ດຳລົງຊີວິດຕາມສິ່ງທີ່ທ່ານຮຽນຮູ້

- ປຽບທຽບສິ່ງທີ່ທ່ານຮຽນຮູ້ ໃສ່ຕົວທ່ານເອງ (see 1 Nephi 19:23).
- ຕັ້ງເປົ້າໝາຍທີ່ຈະດຳລົງຊີວິດຕາມສິ່ງທີ່ທ່ານກຳລັງຮຽນຮູ້.
- ໃຊ້ຊື່ຂອງທ່ານແທນໃນຂໍ້ພະຄຳພີເພື່ອເຮັດໃຫ້ເປັນລັກສະນະສ່ວນຕົວ.
- ຖາມຕົວເອງວ່າ, "ເຮົາຄວນປ່ຽນແປງແນວໃດ ຕາມສິ່ງທີ່ເຮົາໄດ້ຮຽນຮູ້?" ໃຫ້ຕັ້ງເປົ້າໝາຍທີ່ເໝາະສົມ.

### ກິດຈະກຳ: ການສຶກສາສ່ວນຕົວ

ເລືອກໜຶ່ງໃນຂໍ້ອ້າງອີງຫລາຍໆຂໍ້ດັ່ງຕໍ່ໄປນີ້. ເມື່ອທ່ານອ່ານ ແລະ ໄຕ່ຕອງຂໍ້ພະຄຳພີທີ່ທ່ານໄດ້ ເລືອກ, ໃຫ້ບອກສອງ ຫລື ສາມວິທີທີ່ທ່ານສາມາດນຳໃຊ້ມັນໃນຊີວິດຂອງທ່ານ.

- 2 ນີໄຟ 31
- ແອລະມາ 32:26–43
- ໂມໂລໄນ 7:32–48

ປະເມີນເບິ່ງວ່າທ່ານດຳລົງຊີວິດຕາມຫລັກທຳທີ່ທ່ານສອນໄດ້ດີປານໃດ. ເລືອກວິທີໜຶ່ງທີ່ຈະຊ່ອຍທ່ານປັບປຸງ ແລະ ວາງແຜນ ເພື່ອຈະໄດ້ເຮັດຕາມນັ້ນ.

## ສະແຫວງຫາ, ໄຕ່ຕອງ, ແລະ ຈື່ຈຳ

- ຕຽມພ້ອມ. ອອກກຳລັງກາຍ, ອາບນ້ຳ, ແລະ ອະທິຖານກ່ອນທ່ານເລີ່ມການສຶກສາ.
- ສຶກສາຢູ່ໂຕະຂຽນໜັງສື ຫລື ໂຕະທີ່ທ່ານສາມາດຂຽນໄດ້ (ບໍ່ໃຫ້ນອນລົງ ຫລື ນັ່ງຢູ່ບ່ອນນອນ), ຈັດອຸປະກອນສຳລັບການສຶກສາຂອງທ່ານໃຫ້ເປັນລະບຽບ, ແລະ ຕຽມພ້ອມ.
- ອະທິຖານ ແລະ ທູນຂໍເພື່ອຈະໄດ້ເຂົ້າໃຈ.
- ສຶກສາເປັນຫົວຂໍ້.
- ຖາມຕົວເອງວ່າ, "ຜູ້ຂຽນເວົ້າເລື່ອງຫຍັງ? ຈຸດກາງຂອງຂ່າວສານແມ່ນຫຍັງ? ສິ່ງນີ້ກ່ຽວພັນກັບເຮົາແນວໃດ?"
- ນຶກເຫັນພາບທີ່ທ່ານກຳລັງສຶກສາ. ຕົວຢ່າງເຊັ່ນ, ວາດພາບມັນເປັນແນວໃດສຳລັບ ແອມັນ ທີ່ໄດ້ຢືນຢູ່ຕໍ່ໜ້າກະສັດຂອງຊາວເລມັນ.
- ສຶກສາຄຳເວົ້າຂອງສາດສະດາທີ່ມີຊີວິດຢູ່ (ໃນອຸປະກອນສຳລັບຜູ້ສອນສາດສະໜາທີ່ໄດ້ຮັບອະນຸຍາດໃຫ້ໃຊ້ ແລະ ໃນວາລະສານຕ່າງໆຂອງສາດສະໜາຈັກ).
- ຂຽນຄຳຖາມທີ່ທ່ານມີ ໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ, ແລະ ໃຊ້ພະຄຳພີ, ຄຳເວົ້າຂອງສາດສະດາຍຸກສຸດທ້າຍ, ແລະ ແຫລ່ງຊ່ອຍເຫລືອຂອງການສຶກສາອື່ນໆເພື່ອຫາຄຳຕອບ.
- ພະຄຳພີຂໍ້ດຽວອາດບັນຈຸແນວຄິດຫລາຍໆແນວ. ໃຫ້ຂີດກ້ອງ ແລະ ໝາຍຄຳເວົ້າ ຫລື ຂໍ້ຄວາມສັ້ນໆໄວ້ເພື່ອທ່ານຈະເຫັນຄວາມແຕກຕ່າງລະຫວ່າງແນວຄິດຕ່າງໆໃນພະຄຳພີຂໍ້ດຽວນັ້ນ.
- ແບ່ງປັນສິ່ງທີ່ທ່ານຮຽນຮູ້ກັບຜູ້ສອນສາດສະໜາຄົນອື່ນໆ. ທ່ານສາມາດຮຽນຮູ້ຫລາຍສິ່ງຫລາຍຢ່າງ ໂດຍການອະທິບາຍຄຳສອນ ຫລື ຫລັກທຳໃຫ້ຄົນອື່ນ.
- ໝາຍພະຄຳພີຂອງທ່ານ ແລະ ຂຽນຂໍ້ຄວາມໄວ້ໃນພະຄຳພີ. ຢູ່ຂອບນອກ ໃຫ້ຂຽນຂໍ້ພະຄຳພີອ້າງອີງທີ່ໃຫ້ຄວາມແຈ່ມແຈ້ງແກ່ຂໍ້ພະຄຳພີທີ່ທ່ານກຳລັງສຶກສາຢູ່.
- ທ່ອງຈຳຂໍ້ພະຄຳພີທີ່ອະທິບາຍ ແລະ ສະໜັບສະໜູນຫລັກທຳທີ່ທ່ານສອນ.

## ໃຊ້ອຸປະກອນສຳລັບການສຶກສາ

- ໃຊ້ແຫລ່ງຊ່ອຍເຫລືອສຶກສາໃນ LDS edition of the scriptures (Topical Guide, Bible Dictionary, Joseph Smith Translation, Index to the triple combination, ຫົວຂໍ້ບົດ, ໝາຍເຫດຂ້າງລຸ່ມ, ແລະ ແຜນທີ່).
- ໃຊ້ບົດຮຽນຂອງຜູ້ສອນສາດສະໜາ, ອຸປະກອນສຳລັບຜູ້ສອນສາດສະໜາທີ່ໄດ້ຮັບອະນຸຍາດ, ວາລະສານຂອງສາດສະໜາຈັກ, ແລະ ປຶ້ມຫົວນີ້.
- ທົບທວນຫົວຂໍ້ບົດໃນພະຄຳພີ. ການທົບທວນນີ້ຈະໃຫ້ທ່ານມີແນວຄິດກ່ຽວກັບສິ່ງໃດທີ່ຄວນເບິ່ງໃນບົດນັ້ນ.
- ໃຊ້ປຶ້ມບັນທຶກການສຶກສາຂອງທ່ານເພື່ອບັນທຶກ ແລະ ຈັດສິ່ງທີ່ທ່ານກຳລັງຮຽນ. ໃຫ້ທົບທວນຄວາມຄິດທີ່ທ່ານບັນທຶກໄວ້ເລື້ອຍໆ. ຈັດປຶ້ມບັນທຶກຂອງທ່ານໃຫ້ເປັນລະບຽບເພື່ອທ່ານຈະສາມາດຈື່ຈຳສິ່ງທີ່ທ່ານໄດ້ຮຽນມາ.
- ໃຊ້ປຶ້ມນີ້ເປັນປຶ້ມສຳລັບຂຽນ ແລະ ໝາຍໄດ້. ໃຊ້ບ່ອນວ່າງສຳລັບຂຽນເລື່ອງ ແລະ ບັນທຶກຄວາມຮູ້ ສຶກ ແລະ ແນວຄິດ.
- ສຶກສາຂໍ້ພະຄຳພີທີ່ບົ່ງໄວ້ໃນປຶ້ມ. ບັນທຶກຂໍ້ພະຄຳພີອື່ນໆທີ່ທ່ານພົບເຫັນໄວ້ໃນປຶ້ມນີ້ ຫລື ປຶ້ມບັນທຶກການສຶກສາຂອງທ່ານ.

## ເບິ່ງໃຫ້ກວ້າງໄກ

- ເຂົ້າໃຈເລື່ອງລາວທົ່ວໄປໂດຍການອ່ານປຶ້ມນັ້ນ, ອ່ານບົດ, ຫລື ຂໍ້ພະຄຳພີຕ່າງໆຢ່າງໄວ ຫລື ໂດຍການທົບທວນຫົວຂໍ້. ສະແຫວງຫາເພື່ອຈະເຂົ້າໃຈຂໍ້ຄວາມທີ່ຢູ່ໃນປຶ້ມ ແລະ ເລື່ອງທີ່ເປັນມາຂອງມັນ.
- ພະຍາຍາມຂຽນແນວຄິດທີ່ສຳຄັນຂອງຂໍ້ພະຄຳພີໄວ້ເປັນປະໂຫຍກ ຫລື ເປັນວັກສັ້ນ.

ໝາຍເຫດ

ໝາຍເຫດ

- ໃຊ້ພະຄຳພີໄບເບິ້ນ ແລະ ແຜນທີ່ກ່ຽວກັບປະຫວັດສາດຂອງສາດສະໜາຈັກ ເພື່ອຮຽນຮູ້ກ່ຽວກັບພູມີປະເທດ, ລະຍະທາງ, ອາກາດ, ແລະ ພື້ນດິນ.
- ທົບທວນຂັ້ນຕອນຂອງເຫດການ ແລະ ວັດທະນະທຳ. ອ່ານຂໍ້ມູນປະຫວັດສາດໃນ Guide to the Scriptures ແລະ ຂໍ້ສະຫລຸບເນື້ອເລື່ອງຂອງບົດ ແລະ ພາກຕ່າງໆ.

**ກິດຈະກຳ: ການສຶກສາສ່ວນຕົວ**

ອ່ານຂໍ້ສະຫລຸບເນື້ອເລື່ອງຂອງບົດ ໃນປຶ້ມຕ່າງໆຂ້າງລຸ່ມນີ້ ແລະ ຂຽນໂຄງຮ່າງທີ່ບັນລະຍາຍເຖິງສະຖານທີ່, ເຫດການທີ່ສຳຄັນ, ແລະ ຄຳສອນທີ່ສຳຄັນຂອງແຕ່ລະປຶ້ມ.

1 ນີໄຟ      *Moses*      ກິດຈະການ

## ສຳຫລວດຂໍ້ປີກຍ່ອຍ

- ຊອກຫາຈຸດສຳຄັນຂອງຄຳສັບ ແລະ ໃຫ້ໝັ້ນໃຈວ່າທ່ານເຂົ້າໃຈຄວາມໝາຍຂອງມັນ. ໃຊ້ ໝາຍເຫດຂ້າງລຸ່ມ, Guide to the Scriptures, ຫລື ໃຊ້ວັດຈະນານຸກົມຢ່າງອື່ນເພື່ອຊອກຫາຄວາມໝາຍ. ກວດເບິ່ງຄຳ ຫລື ປະໂຫຍກສັ້ນທີ່ໃກ້ຄຽງ ເພື່ອຮ່ອງຮອຍຂອງຄວາມໝາຍຂອງຈຸດສຳຄັນຂອງຄຳສັບ.
- ຊອກຫາຄຳເວົ້າທີ່ຕິດຕໍ່ກັນ, ດັ່ງເຊັ່ນ *ເພາະສະນັ້ນ, ແລະອີກຄັ້ງໜຶ່ງ, ດັ່ງນັ້ນ, ດ້ວຍເຫດນີ້,* ແລະ ອື່ນໆ. ຫລັງຈາກນັ້ນ ໃຫ້ເບິ່ງຂໍ້ພະຄຳພີຂໍ້ຕໍ່ໄປ ແລະ ຂໍ້ກ່ອນ ວ່າກ່ຽວຂ້ອງກັນແນວໃດ.
- ໃຊ້ Guide to the Scriptures ເພື່ອເບິ່ງວ່າ ຄຳດຽວກັນຖືກໃຊ້ແນວໃດໃນຂໍ້ຄວາມອື່ນ ຫລື ສາດສະດາຄົນອື່ນໄດ້ໃຊ້ຄຳດຽວກັນນັ້ນແນວໃດ.
- ຊອກຫາຄຳ ຫລື ປະໂຫຍກສັ້ນທີ່ບໍ່ຮູ້ຈັກມາກ່ອນ ແລະ ເຮັດໃຫ້ແນ່ໃຈວ່າທ່ານເຂົ້າໃຈຄຳ ຫລື ປະໂຫຍກສັ້ນເຫລົ່ານັ້ນ.

## ການໝາຍພະຄຳພີ

ການໝາຍພະຄຳພີຂອງທ່ານ ຈະສາມາດຊ່ອຍທ່ານໃນການຄິດຢ່າງເລິກຊຶ້ງກ່ຽວກັບຂໍ້ພະຄຳພີ ຫລື ຄຳສອນຂອງພະກິດຕິຄຸນ. ທ່ານສາມາດໝາຍພະຄຳພີຂອງທ່ານຫລາຍໆວິທີ. ໃຫ້ຫາວິທີທີ່ໃຊ້ໄດ້ດີສຳລັບທ່ານ. ຂ້າງລຸ່ມນີ້ ແມ່ນຄຳແນະນຳບາງຢ່າງ ສຳລັບການໝາຍພະຄຳພີ.

- ໃຊ້ສໍດຳ ຫລື ສໍສີສຳລັບໝາຍ. ໃຫ້ຫລີກລ້ຽງຈາກການໃຊ້ບິກທີ່ຊຶມໃສ່ເຈ້ຍ.
- ໃຫ້ໝາຍສີ, ຂີດກ້ອງ, ໝາຍວົງເລັບ, ຫລື ຂຽນໂຄງຮ່າງຫຍໍ້ຂອງສ່ວນໃດສ່ວນໜຶ່ງໃນຂໍ້ນັ້ນ, ໝົດທັງຂໍ້, ຫລື ຫລາຍຂໍ້ນຳກັນ.
- ໃຫ້ຫລີກລ້ຽງຈາກການໝາຍຫລາຍເກີນໄປ. ມັນຈະບໍ່ມີປະໂຫຍດຖ້າທ່ານບໍ່ສາມາດເຂົ້າໃຈສິ່ງທີ່ທ່ານໝາຍ ເພາະທ່ານໄດ້ບັນທຶກ, ຂີດເສັ້ນໃສ່ກ້ອງ ແລະ ໃຊ້ໝາຍສີໃສ່ຫລາຍໂພດ.
- ໃຫ້ຂີດເສັ້ນໃສ່ກ້ອງສອງສາມຄຳທີ່ສຳຄັນ, ເທົ່ານັ້ນ ເພື່ອເນັ້ນໜັກຂໍ້ຄວາມສັ້ນໆ, ພາກສ່ວນ, ຫລື ບົດ.
- ໃຫ້ຂີດອ້ອມ ຫລື ຂີດເສັ້ນໃສ່ກ້ອງຄຳທີ່ສຳຄັນ, ແລະ ໃຫ້ຂີດເສັ້ນຊີ້ໄປຫາຄຳທີ່ພົວພັນກັນ.
- ເມື່ອຂໍ້ພະຄຳພີໃດໜຶ່ງມີຄຳສຳຄັນຫລາຍຄຳພົວພັນກັນ, ໃຫ້ໝາຍເລກໃສ່ທາງຂ້າງຂອບໜ້າເຈ້ຍ ຫລື ຢອງໃສ່ຄຳເຫລົ່ານັ້ນ.
- ໃຊ້ຄຳໝາຍເຫດທີ່ຢູ່ທາງກ້ອງໜ້າພະຄຳພີເປັນແຫລ່ງຊ່ອຍເຫລືອສຳລັບໝາຍ ແລະ ແປພະຄຳພີ.
- ໃຫ້ເຮັດເຄື່ອງໝາຍ (ດັ່ງເຊັ່ນເຄື່ອງໝາຍທີ່ສະແດງວ່າກວດສອບແລ້ວ) ໃນຂອບໜ້າເຈ້ຍສຳລັບຈຸດສຳຄັນ ທີ່ທ່ານຮູ້ສຶກວ່າມັນສຳຄັນທີ່ຈະຈື່ຈຳ.

ການໝາຍພະຄຳພີຂອງທ່ານຄວນຊ່ອຍທ່ານໃຫ້ຕັ້ງໃຈໃສ່ໃນການນຳໃຊ້ສິ່ງທີ່ທ່ານຮຽນມາ ແລະ ໃຊ້ໃນການ ສອນຄົນອື່ນໆ. ພັດທະນາວິທີເຂົ້າຫາທີ່ສະໝ່ຳສະເໝີ ແລະ ຊ່ອຍທ່ານໃຫ້ສຳເລັດເປົ້າໝາຍຂອງທ່ານໃນຖານະເປັນຜູ້ສອນສາດສະໜາ.

### ກິດຈະກຳ: ການສຶກສາສ່ວນຕົວ

ຄຳແນະນຳໃດແດ່ທີ່ທ່ານຍັງບໍ່ໄດ້ທົດລອງເທື່ອ? ໃຫ້ຊອກຫາຄຳແນະນຳຂໍ້ໜຶ່ງຈາກ "ແນວຄິດ ແລະ ການແນະນຳສຳລັບການສຶກສາ" ເພື່ອເອົາໄປທົດລອງລະຫວ່າງພາກຮຽນສ່ວນຕົວ ຫລື ກັບຄູ່ສອນສາດສະໜາຄັ້ງຕໍ່ໄປ.

### ໃຫ້ຈື່ຈຳສິ່ງນີ້

- ການຢາກມີຄວາມປາດຖະໜາທີ່ຈະຮຽນຮູ້ເປັນສິ່ງສຳຄັນຕໍ່ຄວາມລອດຂອງທ່ານ ແລະ ຕໍ່ຜົນສຳເລັດຂອງທ່ານໃນຖານະເປັນຜູ້ສອນສາດສະໜາ.
- ທ່ານຮຽນຮູ້ພະກິດຕິຄຸນໂດຍການສຶກສາ, ສັດທາ, ແລະ ອຳນາດແຫ່ງພະວິນຍານບໍລິສຸດ.
- ການຮຽນຮູ້ຄືຄວາມຊື່ນຊົມ ແລະ ຈະນຳພອນຫລາຍໆຢ່າງມາໃຫ້.
- ການສຶກສາສ່ວນຕົວ ແລະ ກັບຄູ່ສອນສາດສະໜາປະຈຳວັນ ຈະເຮັດໃຫ້ສັດທາ ແລະ ຄວາມສາມາດຂອງທ່ານທີ່ຈະສອນໂດຍພະວິນຍານເຂັ້ມແຂງຂຶ້ນ.
- ໃຫ້ໃຊ້ວິທີການສຶກສາທີ່ແຕກຕ່າງກັນ ເພື່ອເຮັດໃຫ້ປະສົບການມີຄວາມໝາຍ ແລະ ມ່ວນຊື່ນໄດ້.

ໝາຍເຫດ

ໝາຍເຫດ

# ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

## ການສຶກສາສ່ວນຕົວ

- ໃຫ້ຊັ່ງຊາຕົວເອງດັ່ງຕໍ່ໄປນີ້ (1=ບໍ່ເຄີຍ, 3=ບາງຄັ້ງ, ແລະ 5=ເກືອບສະເໝີ).
  - ເຮົາຄິດເຖິງຜູ້ຄົນທີ່ເຮົາສອນເມື່ອເຮົາສຶກສາ.
  - ຕະຫລອດວັນເຮົາຄິດເຖິງສິ່ງທີ່ເຮົາໄດ້ສຶກສາໃນຕອນເຊົ້າ.
  - ເມື່ອເຮົາສຶກສາ, ແນວຄິດໄດ້ເຂົ້າມາສູ່ສະໝອງຂອງເຮົາເຊິ່ງບໍ່ໄດ້ເກີດຂຶ້ນນຳເຮົາມາກ່ອນ.
  - ເຮົາບັນທຶກຄວາມຮູ້ສຶກທາງວິນຍານ ແລະ ແນວຄິດໄວ້ໃນບ່ອນທີ່ເໝາະສົມ.
  - ເຮົາເຊືອບຫລັບໄປເມື່ອເຮົາສຶກສາ.
  - ເຮົາຕັ້ງໃຈຖ້າສຳລັບການສຶກສາສ່ວນຕົວ.
  - ເຮົາຕັ້ງໃຈຖ້າສຳລັບການສຶກສາກັບຄູ່ສອນສາດສະໜາ.
- ທົບທວນຄຳຕອບຂອງທ່ານ. ທ່ານເຮັດຫຍັງດີ? ທ່ານຢາກໃຫ້ຄຳຕອບບາງອັນທີ່ ທ່ານຕອບແຕກຕ່າງຈາກນັ້ນບໍ? ຕັ້ງເປົ້າໝາຍໜຶ່ງ ຫລື ສອງຢ່າງທີ່ຈະປັບປຸງຄຸນນະພາບຂອງການສຶກສາຂອງທ່ານ.
- ທົບທວນຄຳຖາມຈາກ "ໃຫ້ພິຈາລະນາເລື່ອງນີ້" ໃນທາງໜ້າຂອງບົດນີ້. ຄຳຖາມເຫລົ່ານີ້ມີອິດທິພົນຕໍ່ການສຶກສາຂອງທ່ານແນວໃດ?
- ທົບທວນ "ແນວຄິດ ແລະ ຄຳແນະນຳສຳລັບການສຶກສາ." ໃຫ້ຊອກຫາຄຳແນະນຳຂໍ້ໜຶ່ງຈາກແຕ່ລະຈຳພວກທີ່ທ່ານຍັງບໍ່ໄດ້ໃຊ້, ແລະ ໃຫ້ທົບທວນແນວຄິດເຫລົ່ານີ້ລະຫວ່າງການສຶກສາສ່ວນຕົວຂອງທ່ານ.
- ອ່ານ Doctrine and Covenants 138:1–11. ເມື່ອທ່ານອ່ານຂໍ້ເຫລົ່ານີ້, ໃຫ້ຕອບຄຳຖາມດັ່ງຕໍ່ໄປນີ້:
  - ປະທານ ສະມິດ ໄດ້ເຮັດແນວໃດເພື່ອເຮັດໃຫ້ຈິດໃຈຂອງເພິ່ນເປີດຮັບ?
  - ເພິ່ນໄດ້ຮູ້ສຶກແນວໃດແດ່ກ່ຽວກັບຄຳສອນທີ່ເພິ່ນກຳລັງຄິດເຖິງ?
- ອ່ານຄວາມໝາຍຂອງຄວາມຮູ້ນີ້ໃນ Guide to the Scriptures ແລະ ລາຍຊື່ຂໍ້ອ້າງອີງ. ໃນປຶ້ມບັນທຶກການສຶກສາຂອງທ່ານ, ໃຫ້ຕອບຄຳຖາມນີ້: "ຄວາມຮູ້ອັນໃດທີ່ຈະສາມາດຊ່ວຍເຮົາໃຫ້ຮັບໃຊ້ຢ່າງໄດ້ຜົນໃນຖານະເປັນຜູ້ສອນສາດສະໜາ?"
- ເລືອກຄຳສອນຈາກບົດທີ 3 ທີ່ທ່ານຢາກເຂົ້າໃຈດີຂຶ້ນ. ຂຽນຄຳຖາມທີ່ທ່ານຢາກຕອບລົງໃນປຶ້ມບັນທຶກ ການສຶກສາຂອງທ່ານ. ສຶກສາຄຳສອນນັ້ນຢ່າງຖ້ວນຖີ່ຊົ່ວລະຍະໜຶ່ງ (ສອງສາມມື້), ແລະ ອະທິຖານສຳລັບຄວາມເຂົ້າໃຈເພີ່ມເຕີມ ໂດຍສະເພາະ. ຂຽນສິ່ງທີ່ທ່ານຮຽນຮູ້ລົງໄວ້.
- ອ່ານ 1 Nephi 10:17; 11:1–6. ເມື່ອທ່ານອ່ານຂໍ້ເຫລົ່ານີ້, ໃຫ້ຕອບຄຳຖາມນີ້: "ເປັນຫຍັງນີໄຟ ຈຶ່ງສາມາດຮຽນຮູ້ສິ່ງທີ່ພໍ່ຂອງເພິ່ນຮູ້ຈັກ?"

### ການສຶກສາກັບຄູ່ສອນສາດສະໜາ

- ອ່ານຂໍ້ພະຄຳພີດັ່ງຕໍ່ໄປນີ້ນຳຄູ່ສອນສາດສະໜາ. ໃຫ້ຕອບຄຳຖາມນີ້: "ເປັນຫຍັງພວກເຮົາຈຶ່ງຄວນສະແຫວງຫາແສງສະຫວ່າງຂອງພະຜູ້ເປັນເຈົ້າ?"

| | | |
|---|---|---|
| D&C 11:11–14 | ໂຢຮັນ 8:12 | ເພງສັນລະເສີນ 119:105 |
| D&C 84:43–47 | | |

- ອ່ານຂໍ້ພະຄຳພີຫລາຍຂໍ້ຂ້າງລຸ່ມນີ້ນຳຄູ່ສອນສາດສະໜາ, ແລະ ສົນທະນາກ່ຽວກັບພອນທີ່ມາຈາກການສຶກສາພະຄຳຂອງພະເຈົ້າ. ພະຄຳພີຂໍ້ໃດຈະຊ່ອຍຄົນທີ່ທ່ານສອນໄດ້ດີທີ່ສຸດ?

| | | |
|---|---|---|
| 1 Nephi 10:19 | ແອລະມາ 32:42–43 | D&C 130:19 |
| 2 ນີໄຟ 32:3 | Alma 37:44–46 | Guide to the Scriptures, "Scriptures," subheading: "Value of the scriptures," 221–22 |
| Mosiah 1:6–7 | Alma 49:30 | |
| Alma 17:2–3 | D&C 90:24 | |

### ການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດ

- ເລືອກຫົວຂໍ້ຈາກໜຶ່ງໃນຈຳນວນບົດຮຽນຂອງຜູ້ສອນສາດສະໜາທີ່ທ່ານໄດ້ສຶກສາຢ່າງລະມັດລະວັງ. ໃຫ້ເຮັດຕາມດັ່ງຕໍ່ໄປນີ້:
  - ແບ່ງປັນຈຸດສຳຄັນສອງສາມຂໍ້ທີ່ທ່ານໄດ້ຮຽນຈາກການສຶກສາຂອງທ່ານທີ່ເປັນປະໂຫຍດໃນການສອນບົດຮຽນນັ້ນ.
  - ບັນລະຍາຍວິທີທີ່ທ່ານໄດ້ສຶກສາເພື່ອຊ່ອຍທ່ານໃຫ້ຄົ້ນພົບຈຸດເຫລົ່ານີ້ (ວິທີທີ່ທ່ານອ່ານ, ແຫລ່ງຊ່ອຍເຫລືອທີ່ທ່ານໃຊ້, ຄຳຖາມທີ່ທ່ານຄົ້ນຄວ້າ, ແລະ ອື່ນໆ).
  - ສະແດງວິທີທີ່ທ່ານບັນທຶກ ແລະ ຈັດຜົນການສຶກສາຂອງທ່ານ.

  ຖ້າຍັງມີເວລາເຫລືອຢູ່, ຂໍໃຫ້ຜູ້ສອນສາດສະໜາສອງສາມຄົນໃຫ້ເຮັດຄືກັນ.

- ກິດຈະກຳນີ້ອາດຈະສາມາດເຮັດເປັນສ່ວນບຸກຄົນ ຫລື ເປັນກຸ່ມນ້ອຍ. ແນະນຳໃຫ້ຜູ້ສອນສາດສະໜາ ໃຫ້ເລືອກໜຶ່ງໃນຄຳຖາມດັ່ງຕໍ່ໄປນີ້ (ຫລື ທ່ານອາດຈະສ້າງຄຳຖາມຂອງທ່ານຂຶ້ນເອງ). ໃຫ້ເຂົາເຈົ້າຂຽນ ຄຳຖາມລົງ.
  - ເປັນຫຍັງຄອບຄົວຈຶ່ງເປັນສິ່ງສຳຄັນຕໍ່ແຜນຂອງພະເຈົ້າ?
  - ເປັນຫຍັງຜູ້ຄົນຈຶ່ງມີບັນຫາ ແລະ ຄວາມທຸກທໍລະມານ?
  - ພະວິນຍານມີບົດບາດແນວໃດຕໍ່ການປ່ຽນແປງ?

  ບອກວ່າ ເຂົາເຈົ້າຈະມີຫ້າ ຫາ ເຈັດນາທີເພື່ອ:
  - ຊອກຫາຂໍ້ພະຄຳພີຢ່າງໜ້ອຍທີ່ສຸດສອງສາມຂໍ້ເພື່ອເປັນຂໍ້ອ້າງອີງທີ່ຈະຕອບຄຳຖາມ.
  - ຂຽນການແປຄວາມໝາຍງ່າຍໆວ່າ ພະຄຳພີທີ່ເຂົາເຈົ້າເລືອກນັ້ນ ຕອບຄຳຖາມແນວໃດ.
  - ບັນລະຍາຍສິ່ງທີ່ເຂົາເຈົ້າຈະເຮັດເພື່ອໃຫ້ຈື່ຈຳຄຳຕອບ.
  - ບັນລະຍາຍສິ່ງທີ່ເຂົາເຈົ້າຈະເຮັດເພື່ອສຳຫລວດຄຳຖາມໃຫ້ເລິກຊຶ້ງຫລາຍຂຶ້ນ.

  ເຊື້ອເຊີນຜູ້ສອນສາດສະໜາສອງສາມຄົນ (ຫລື ແຕ່ລະກຸ່ມ) ໃຫ້ແບ່ງປັນຄຳຕອບຂອງເຂົາເຈົ້າ. ສົນທະນາກ່ຽວກັບຄຳຕອບຂອງເຂົາເຈົ້າ.

ໝາຍເຫດ

ໝາຍເຫດ

- ຂໍໃຫ້ຜູ້ສອນສາດສະໜາຂຽນຄຳຖາມຂໍ້ໜຶ່ງ ຫລື ສອງຂໍ້ກ່ຽວກັບຫລັກທຳຂອງພະກິດຕິຄຸນ ແລະ ຄຳສອນຈາກໜຶ່ງໃນຈຳນວນບົດຮຽນ ຢູ່ໃນບົດທີ 3 ເຊິ່ງເຂົາເຈົ້າຈະຊອກຫາຄຳຕອບໄດ້. ເຊື້ອເຊີນຜູ້ສອນສາດສະໜາໃຫ້ແບ່ງປັນຄຳຖາມຂອງເຂົາເຈົ້ານຳກຸ່ມ. ໃຫ້ສົນທະນາກ່ຽວກັບແຕ່ລະຄຳຖາມດັ່ງຕໍ່ໄປນີ້:
  - ການຕອບຄຳຖາມນີ້ຈະເປັນພອນແກ່ຊີວິດຂອງຜູ້ສອນສາດສະໜາໄດ້ແນວໃດ?
  - ມັນຈະເປັນພອນແກ່ຜູ້ສົນໃຈໄດ້ແນວໃດ?
  - ຜູ້ສອນສາດສະໜາຈະຊອກຫາຄຳຕອບໄດ້ແນວໃດ?

- ຂໍໃຫ້ຜູ້ສອນສາດສະໜາຫລາຍຄົນແບ່ງປັນຫລັກທຳພະກິດຕິຄຸນຂໍ້ໜຶ່ງ ທີ່ຄູ່ສອນສາດສະໜາຂອງເຂົາເຈົ້າໄດ້ສອນເຂົາເຈົ້າ. ຂໍໃຫ້ເຂົາເຈົ້າອະທິບາຍຫລັກທຳ ແລະ ວິທີທີ່ຄູ່ສອນສາດສະໜາສອນມັນ ແກ່ເຂົາເຈົ້າ.

- ຈັດຜູ້ສອນສາດສະໜາໃຫ້ເປັນຄູ່ກັນ ຫລື ເປັນກຸ່ມນ້ອຍ. ມອບໝາຍໃຫ້ແຕ່ລະກຸ່ມອ່ານບົດໜຶ່ງຈາກພະຄຳພີມໍມອນ. ໃຫ້ແຕ່ລະກຸ່ມເລືອກແນວຄິດຈາກໜຶ່ງໃນຫ້າຈຳພວກ ໃນພາກ "ແນວຄິດ ແລະ ຄຳແນະນຳສຳລັບການສຶກສາ." ເຊື້ອເຊີນກຸ່ມທັງຫລາຍໃຫ້ໃຊ້ຄຳແນະນຳແຕ່ລະຂໍ້ ເມື່ອເຂົາເຈົ້າອ່ານບົດຂອງເຂົາເຈົ້າຮ່ວມກັນ. ໃຫ້ໃຊ້ເວລາ 15 ຫາ 20 ນາທີສຳລັບອ່ານ ແລະ ການສົນທະນາ. ໃຫ້ແຕ່ລະກຸ່ມອະທິບາຍຄຳແນະນຳທີ່ເຂົາເຈົ້າໄດ້ໃຊ້, ຄຳແນະນຳໃຊ້ໄດ້ດີຂະໜາດໃດ, ແລະ ເຂົາເຈົ້າໄດ້ຮຽນຮູ້ຫຍັງແດ່.

- ເຊື້ອເຊີນຜູ້ສອນສາດສະໜາແຕ່ລະຄົນໃຫ້ຄິດຫາເລື່ອງ ຫລື ເຫດການໃນພະຄຳພີທີ່ມີຄວາມໝາຍຕໍ່ ເຂົາເຈົ້າ (ດັ່ງເຊັ່ນ ນິມິດຂອງລີໄຮກ່ຽວກັບຕົ້ນໄມ້ແຫ່ງຊີວິດ, ຄຳປາໄສຂອງກະສັດ ເບັນຢາມິນ, ຄຳເທດສະໜາຢູ່ຈ້າຍພູ, ຫລື ການປາກົດກາຍຂອງພະຄິດຕໍ່ຊາວນີໄຟ). ເຊື້ອເຊີນຜູ້ສອນສາດສະໜາໃຫ້ແຕ້ມຮູບ ຫລື ບັນລະຍາຍສິ່ງທີ່ເຂົາເຈົ້າໄດ້ວາດພາບເຖິງເຫດການທີ່ເຂົາເຈົ້າໄດ້ເລືອກ. ເຊື້ອເຊີນຜູ້ສອນສາດສະໜາສອງສາມຄົນໃຫ້ແບ່ງປັນສິ່ງທີ່ເຂົາເຈົ້າວາດພາບ. ຂໍໃຫ້ຜູ້ສອນສາດສະໜາຄົນອື່ນໆເລົ່າເລື່ອງ ແລະ ປຽບທຽບມັນໃສ່ກັບຄຳສອນ ໃນໜຶ່ງຂອງຈຳນວນບົດຮຽນທັງຫລາຍ. ອ່ານ ໂມໂລໄນ 10:3 ແລະ ສົນທະນາກ່ຽວກັບຄວາມສຳຄັນຂອງການໄຕ່ຕອງຢ່າງເລິກຊຶ້ງກ່ຽວກັບຄວາມຮູ້ທາງວິນຍານ.

## ປະທານເຜີຍແຜ່

- ໃຫ້ເຊື້ອເຊີນຜູ້ສອນສາດສະໜາໃຫ້ເອົາປຶ້ມບັນທຶກການສຶກສາຂອງເຂົາເຈົ້າມານຳ ເມື່ອທ່ານສຳພາດເຂົາເຈົ້າ. ເຊື້ອເຊີນເຂົາເຈົ້າໃຫ້ແບ່ງປັນບັນທຶກຂໍ້ໜຶ່ງນຳທ່ານ.

- ຕອນສຳພາດ, ໃຫ້ຖາມຄຳຖາມບາງຂໍ້ດັ່ງຕໍ່ໄປນີ້:
  - ເຈົ້າມີຄວາມຮູ້ສຶກແນວໃດໃນບໍ່ດົນມານີ້ກ່ຽວກັບການສຶກສາພະຄຳພີຂອງເຈົ້າ?
  - ແມ່ນຫຍັງຄືຫລັກທຳພະກິດຕິຄຸນຂໍ້ໜຶ່ງທີ່ຄູ່ສອນສາດສະໜາຂອງເຈົ້າສອນເຈົ້າໃນບໍ່ດົນມານີ້?
  - ບົດໃດ ຫລື ສ່ວນໃດໃນປຶ້ມນີ້ໄດ້ຊ່ອຍເຫລືອເຈົ້າໃຫ້ຮຽນຮູ້ຫລາຍທີ່ສຸດໃນສອງອາທິດທີ່ຜ່ານມາ?

ໝາຍເຫດ

- ເຈົ້າເຮັດແນວໃດໃນການສຶກສາສ່ວນຕົວຂອງເຈົ້າທີ່ຊ່ອຍເຈົ້າຮຽນຮູ້ຫລາຍທີ່ສຸດ?

- ລະຫວ່າງກອງປະຊຸມເຂດ, ໃຫ້ເຊື້ອເຊີນຜູ້ສອນສາດສະໜາໃຫ້ແບ່ງປັນປະສົບການທີ່ມີຄວາມໝາຍທີ່ເຂົາເຈົ້າມີໃນການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ.

- ລະຫວ່າງກອງປະຊຸມເຂດ, ໃຫ້ຜູ້ສອນສາດສະໜາແບ່ງປັນແນວຄິດກ່ຽວກັບການສຶກສາສ່ວນຕົວ.

- ໃຫ້ແບ່ງປັນນຳຜູ້ສອນສາດສະໜາກ່ຽວກັບຄວາມຮູ້ສຶກທີ່ທ່ານມີຕອນທ່ານສຶກສາສ່ວນຕົວ. ແບ່ງປັນສິ່ງທີ່ທ່ານຂຽນໃນປຶ້ມບັນທຶກການສຶກສາຂອງທ່ານ ແລະ ສະແດງປະຈັກພະຍານຂອງທ່ານກ່ຽວກັບຄວາມສຳຄັນຂອງການສຶກສາພະກິດຕິຄຸນ.

- ເມື່ອທ່ານສາມາດເຮັດໄດ້, ໃຫ້ສຶກສານຳຜູ້ສອນສາດສະໜາກັບຄູ່ຂອງລາວ.

- ຕອນສຳພາດ, ໃຫ້ເຊື້ອເຊີນຜູ້ສອນສາດສະໜາຈັກໃຫ້ແບ່ງປັນໜຶ່ງໃນຈຳນວນແຜນບົດຮຽນຈາກບົດຮຽນຂອງຜູ້ສອນສາດສະໜາ. ຖາມເຂົາເຈົ້າວ່າ ຄຳສອນເຫລົ່ານີ້ມີຄວາມໝາຍແນວໃດຕໍ່ເຂົາເຈົ້າ.

ໝາຍເຫດ



The Sermon on the Mount, by Carl Bloch. Original at the chapel of Frederiksborg Castle, Denmark. Used by permission of the Frederiksborgmuseum. ຫ້າມລອກແບບ.

# ເຮົາຈະສຶກສາ ແລະ ສອນຫຍັງແດ່?

ບົດຮຽນໃນພາກນີ້ປະກອບດ້ວຍຄຳສອນ, ຫລັກທຳ, ແລະ ພະບັນຍັດຕ່າງໆທີ່ທ່ານຄວນສຶກສາ, ເຊື່ອ, ຮັກ, ດຳລົງຊີວິດ, ແລະ ສອນ. ສາດສະດາ ແລະ ອັກຄະສາວົກທີ່ມີຊີວິດຢູ່ທັງຫລາຍໄດ້ແນະນຳໃຫ້ທ່ານສອນ. ບົດຮຽນເຫລົ່ານີ້ມີໄວ້ເພື່ອໃຫ້ທ່ານສາມາດຊ່ອຍຄົນອື່ນໃຫ້ເຂົ້າໃຈຄຳສອນຂອງພະຄິດຢ່າງແຈ່ມແຈ້ງ.

ບົດຮຽນໃນພາກນີ້ມີດັ່ງຕໍ່ໄປນີ້:

- ຂ່າວສານຂອງການຟື້ນຟູພະກິດຕິຄຸນຂອງພະເຢຊູຄິດ
- ແຜນແຫ່ງຄວາມລອດ
- ພະກິດຕິຄຸນຂອງພະເຢຊູຄິດ
- ພະບັນຍັດ
- ກົດ ແລະ ພິທີການ

ໃຫ້ສອນສີ່ບົດຮຽນທຳອິດ ກ່ອນຜູ້ສົນໃຈຈະຮັບບັບຕິດສະມາ. ໃຫ້ແນ່ໃຈວ່າ ຄົນທີ່ທ່ານສອນມີຄ່າຄວນທີ່ຈະ ຮັບບັບຕິດສະມາ ແລະ ຮັບການຢືນຢັນ ໂດຍການເຮັດ ແລະ ຮັກສາຄຳໝັ້ນສັນຍາທັງໝົດທີ່ມີໃນ ບົດຮຽນເຫລົ່ານີ້.

ຜູ້ສອນສາດສະໜາເຕັມເວລາເປັນຜູ້ນຳພາການສອນບົດຮຽນກ່ອນບັບຕິດສະມາ ພ້ອມດ້ວຍການຊ່ອຍເຫລືອ ຂອງຜູ້ສອນສາດສະໜາປະຈຳຫວອດ ແລະ ສະມາຊິກຄົນອື່ນໆ. ຫລັງຈາກຮັບບັບຕິດສະມາແລ້ວ, ສະມາຊິກ ໃໝ່ຈະໄດ້ຖືກສອນສີ່ບົດຮຽນທຳອິດນັ້ນອີກ, ພ້ອມດ້ວຍບົດຮຽນ "ກົດ ແລະ ພິທີການ." ຜູ້ນຳຂອງຫວອດ ຈະເປັນຜູ້ຕັດສິນໃຈວ່າ ຈະໃຫ້ຜູ້ສອນສາດສະໜາປະຈຳຫວອດ ຫລື ຈະໃຫ້ຜູ້ສອນສາດສະໜາເຕັມເວລາ ຮັບຜິດຊອບໃນການສອນບົດຮຽນ ແລະ ຈະໃຫ້ຜູ້ສອນສາດສະໜາເຕັມເວລາກ່ຽວຂ້ອງໃນການສອນດົນປານໃດ. ຊຸກຍູ້ສະມາຊິກໃໝ່ໃຫ້ຮັກສາຄຳໝັ້ນສັນຍາທັງໝົດໃນບົດຮຽນເຫລົ່ານີ້.

ທ່ານຄວນຈະໃຊ້ບົດຮຽນເຫລົ່ານີ້ໃນການສຶກສາສ່ວນຕົວ ແລະ ໃນການສຶກສາກັບຄູ່ຜູ້ສອນສາດສະໜາຂອງທ່ານ, ໃນການປະຊຸມທ້ອງຖິ່ນ, ແລະ ໃນການຝຶກອົບລົມຕ່າງໆ. ໃນຂະນະທີ່ທ່ານສຶກສາພະຄຳພີ ແລະ ສະສົມຄຳສອນໃນບົດຮຽນເຫລົ່ານີ້ໄວ້ໃນຈິດໃຈຂອງທ່ານ, ພະວິນຍານຈະຊ່ອຍທ່ານໃຫ້ຮູ້ຄຳທີ່ທ່ານຄວນຈະກ່າວ ພ້ອມດ້ວຍສິ່ງທີ່ທ່ານຄວນຈະເຮັດ ໃນເວລາທີ່ເໝາະສົມ ເພື່ອຈະຊ່ອຍຄົນອື່ນໄດ້ຮັບປະຈັກພະຍານກ່ຽວກັບຄວາມຈິງຂອງຄຳສອນເຫລົ່ານັ້ນ.

ໃນຖານະເປັນຜູ້ສອນສາດສະໜາ, ທ່ານມີໜ້າທີ່ຮັບຜິດຊອບອັນຍິ່ງໃຫຍ່ເພື່ອຈະສອນຈາກຈິດໃຈ ແລະ ໂດຍພະວິນຍານ. ຝ່າຍປະທານສູງສຸດ ແລະ ກຸ່ມອັກຄະສາວົກສິບສອງໄດ້ກ່າວວ່າ: "ຈຸດປະສົງຂອງເຮົາແມ່ນ ທີ່ຈະສອນຂ່າວສານຂອງພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ ໃນວິທີທີ່ຈະໃຫ້ພະວິນຍານເປັນຜູ້ນຳທາງ ທັງຜູ້ສອນສາດສະໜາ ແລະ ຜູ້ຖືກສອນ.

ໝາຍເຫດ

ໝາຍເຫດ

ເປັນສິ່ງສຳຄັນທີ່ທ່ານຈະຮຽນຮູ້ເຖິງຄວາມເລິກຊຶ້ງຂອງ [ບົດຮຽນ], ແຕ່ບໍ່ຄວນສອນໂດຍຄວາມທ່ອງຈຳ. ຜູ້ສອນສາດສະໜາຄວນຈະມີອິດສະລະທີ່ຈະໃຊ້ຄຳເວົ້າຂອງຕົນເອງ ໂດຍການກະຕຸ້ນຂອງພະວິນຍານ. ເຂົາບໍ່ຄວນສອນບົດຮຽນຕາມຄວາມທ່ອງຈຳ, ແຕ່ເວົ້າອອກມາຈາກຫົວໃຈ ໃນຄຳເວົ້າຂອງຕົນເອງ. ເຂົາອາດຈະອອກນອກເລື່ອງ, ເມື່ອຖືກດົນໃຈໃຫ້ເຮັດ, ຂຶ້ນຢູ່ກັບຄວາມສົນໃຈ ແລະ ຄວາມຕ້ອງການຂອງຜູ້ສົນໃຈ. ຈາກການເວົ້າດ້ວຍຄວາມເຊື່ອໝັ້ນ ແລະ ໃຊ້ຄຳເວົ້າຂອງຕົນເອງ, ເຂົາຄວນຈະສະແດງປະຈັກພະຍານກ່ຽວກັບຄວາມຈິງຂອງສິ່ງທີ່ເຂົາສອນ” (“Statement on Missionary Work,” ຈົດໝາຍຈາກຝ່າຍປະທານສູງສຸດ, ວັນທີ 11 ເດືອນທັນວາ ປີ 2002). ໃນຂະນະທີ່ທ່ານ ແລະ ຄູ່ຜູ້ສອນສາດສະໜາຂອງທ່ານສຶກສາບົດຮຽນເຫລົ່ານີ້ ແລະ ຕຽມຕົວທີ່ຈະສອນ, ໃຫ້ຈື່ຈຳຄຳແນະນຳເຫລົ່ານີ້. ໃຫ້ໝັ້ນໃຈວ່າທ່ານໄດ້ສອນຄຳສອນທັງໝົດໃນບົດຮຽນເຫລົ່ານີ້.

ນອກຈາກວ່າທ່ານໄດ້ຖືກນຳພາໂດຍພະວິນຍານ, ສຳລັບສາມບົດທຳອິດ, ທ່ານຄວນສອນຂໍ້ຄວາມທັງໝົດຕາມຂັ້ນຕອນທີ່ໄດ້ບົ່ງໄວ້. ທ່ານອາດຈະຮ່ວມພະບັນຍັດສອງສາມຂໍ້ເຂົ້ານຳຕາມຄວາມເໝາະສົມ ຫລື ສອນເປັນບົດຮຽນຂອງມັນເອງຕ່າງຫາກ.

ແຕ່ລະບົດຮຽນມີໂຄງຮ່າງຂອງຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ, ຄຳໝັ້ນສັນຍາ, ແລະ ຄຳສອນທີ່ທ່ານຄວນຈະສອນ. ໃຫ້ຮຽນຄຳສອນເຫລົ່ານີ້ໃຫ້ລະອຽດ. ຕັ້ງໃຈຢ່າງສະໝ່ຳສະເໝີໃນການຊ່ອຍເຫລືອຜູ້ທີ່ທ່ານສອນໃຫ້ເຮັດ ແລະ ຮັກສາຄຳໝັ້ນສັນຍາ. ໃຫ້ໃຊ້ ຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ ເພື່ອຕຽມພ້ອມຄົນທີ່ທ່ານສອນໃນການຮັບບັບຕິດສະມາ ແລະ ຮັບການຢືນຢັນ. ບົດຮຽນເຫລົ່ານີ້ ມີແນວຄິດສຳລັບການສອນຄືກັນ. ໃຫ້ໃຊ້ຄຳແນະນຳເຫລົ່ານີ້ເພື່ອເພີ່ມຄວາມເຂັ້ມແຂງ ວິທີທີ່ທ່ານຕຽມພ້ອມ ແລະ ສອນ.

## ບົດບາດຂອງການທ່ອງຈຳ

ໃຫ້ທ່ອງຈຳຂໍ້ພະຄຳພີທີ່ທ່ານຈະໃຊ້ໃນການສອນຂອງທ່ານ. ຕັ້ງໃຈຈື່ຈຳລຳດັບຈຸດສຳຄັນຂອງຫລັກທຳໃນແຕ່ລະບົດຮຽນຂອງຜູ້ສອນສາດສະໜາ. ຜູ້ສອນສາດສະໜາທີ່ຮຽນພາສາທີສອງຄວນຕັ້ງໃຈສຶກສາພາສາຂອງເຂົາເພື່ອຕຽມພ້ອມທີ່ຈະສອນບົດຮຽນເຫລົ່ານັ້ນ. ເຂົາຄວນທ່ອງຈຳຄຳສັບ, ຖ້ອຍຄຳ, ແບບແຜນຂອງປະໂຫຍກ, ແລະ ຄຳເວົ້າສັ້ນໆຂອງຄຳສອນທີ່ມີຢູ່ໃນບົດຮຽນ, ແຕ່ວ່າຄວນທ່ອງຈຳ ພຽງແຕ່ເມື່ອຂໍ້ຄວາມເຫລົ່ານີ້ ມີຄວາມໝາຍສຳຄັນຕໍ່ຕົວທ່ານເທົ່ານັ້ນ. ຫ້າມບໍ່ໃຫ້ທ່ອງຈຳຄຳທັງໝົດໃນບົດຮຽນ.

## ສອນດ້ວຍຄວາມແຈ່ມແຈ້ງ

ໃນທ້າຍຂອງສາມບົດຮຽນທຳອິດ ຈະມີຄຳສັບຈຳນວນໜຶ່ງ ເຊິ່ງຜູ້ທີ່ທ່ານສອນອາດບໍ່ຮູ້ຈັກມາກ່ອນ. ໃຫ້ຮຽນວິທີແປຄວາມໝາຍຄຳສັບເຫລົ່ານີ້ແບບງ່າຍໆ. ເມື່ອທ່ານສອນ, ໃຫ້ເຮັດສຸດຄວາມສາມາດຂອງທ່ານ ເພື່ອຈະເຮັດໃຫ້ບົດຮຽນເຫລົ່ານີ້ເຂົ້າໃຈໄດ້ງ່າຍ.

## ການສຶກສາພະຄຳພີ

**ແມ່ນຫຍັງທີ່ທ່ານໄດ້ຖືກແນະນຳໃຫ້ສອນ?**

ໂມໄຊຢາ 18:18–20 D&C 43:15–16 D&C 52:9

**ເປັນຫຍັງທ່ານຕ້ອງສຶກສາຄຳສອນທັງໝົດໃນບົດຮຽນ?**

Alma 17:2–3 D&C 84:85

ໝາຍເຫດ

# ຂ່າວສານຂອງການຟື້ນຟູ ພະກິດຕິຄຸນຂອງພະເຢຊູຄຣິດ



© 1991 Greg K. Olsen. ຫ້າມລອກແບບ.

## ເປົ້າໝາຍຂອງທ່ານ

ເມື່ອທ່ານສອນ, ໃຫ້ຕຽມຜູ້ສົນໃຈຂອງທ່ານໃຫ້ມີຄ່າຄວນທີ່ຈະຮັບການບັບຕິສະມາ ເຊິ່ງໄດ້ສອນໄວ້ ໃນ Doctrine and Covenants 20:37 ແລະ ໃນຄຳຖາມສຳລັບການສຳພາດກ່ອນບັບຕິສະມາ. ວິທີນີ້ ຈະປະສົບຜົນສຳເລັດດີທີ່ສຸດ ໂດຍການເຊື້ອເຊີນຜູ້ສົນໃຈຂອງທ່ານໃຫ້ເຮັດ ແລະ ຮັກສາຄຳໝັ້ນສັນຍາທີ່ບົ່ງໄວ້ຂ້າງລຸ່ມນີ້.

### ຄຳຖາມສຳລັບການສຳພາດກ່ອນບັບຕິສະມາ

- ທ່ານເຊື່ອບໍ່ວ່າພະເຈົ້າເປັນພະບິດາຊົ່ວນິລັນດອນຂອງພວກເຮົາ?
- ທ່ານເຊື່ອບໍ່ວ່າພະເຢຊູຄຣິດເປັນພະບຸດຂອງພະເຈົ້າ, ພະຜູ້ຊ່ອຍໃຫ້ລອດ ແລະ ພະຜູ້ໄຖ່ຂອງໂລກ?
- ທ່ານເຊື່ອບໍ່ວ່າສາດສະໜາຈັກ ແລະ ພະກິດຕິຄຸນຂອງພະເຢຊູຄຣິດ ໄດ້ຖືກຟື້ນຟູຄືນມາໃໝ່ຜ່ານສາດສະດາ ໂຢເຊັບ ສະມິດ?
- ທ່ານເຊື່ອບໍ່ວ່າປະທານ [ປະທານຂອງສາດສະໜາຈັກໃນປະຈຸບັນ] ເປັນສາດສະດາຂອງພະເຈົ້າ? ນີ້ໝາຍຄວາມວ່າແນວໃດສຳລັບທ່ານ?

### ຄຳໝັ້ນສັນຍາ

- ທ່ານຈະອ່ານ ແລະ ອະທິຖານເພື່ອໃຫ້ຮູ້ວ່າພະຄຳພີມໍມອນເປັນພະຄຳຂອງພະເຈົ້າບໍ?
- ທ່ານຈະອະທິຖານເພື່ອໃຫ້ຮູ້ວ່າ ໂຢເຊັບ ສະມິດ ເປັນສາດສະດາບໍ?
- ທ່ານຈະໄປໂບດນຳພວກເຮົາບໍ່ວັນອາທິດນີ້?
- ພວກເຮົາຂໍນັດເວລາມາຢ້ຽມຢາມເທື່ອໜ້າໄດ້ບໍ?
- ພະບັນຍັດອື່ນໆຈາກບົດຮຽນທີ 4 ທີ່ທ່ານເລືອກເອົາມາຮ່ວມ.

## ພະເຈົ້າເປັນພະບິດາເທິງສະຫວັນທີ່ຮັກຂອງເຮົາ

ພະເຈົ້າຊົງເປັນພະບິດາເທິງສະຫວັນຂອງເຮົາ. ເຮົາເປັນລູກໆຂອງພະອົງ. ພະອົງມີຮ່າງກາຍທີ່ເປັນເນື້ອໜັງ ແລະ ກະດູກ ທີ່ ມີລັດສະໝີພາບ ແລະ ດີພ້ອມທຸກຢ່າງ. ພະອົງຮັກເຮົາ. ພະອົງຮ້ອງໄຫ້ກັບເຮົາເມື່ອເວລາທີ່ເຮົາເຈັບປວດ ແລະ ຊື່ນຊົມເມື່ອເວລາທີ່ເຮົາເຮັດສິ່ງທີ່ຖືກຕ້ອງ. ພະອົງຢາກຕິດຕໍ່ກັບເຮົາ, ແລະ ເຮົາສາມາດຕິດຕໍ່ກັບພະອົງ ໂດຍການອະທິຖານຢ່າງຈິງໃຈ.

ໝາຍເຫດ

ພະອົງໄດ້ມອບປະສົບການໃນໂລກນີ້ໃຫ້ເຮົາ ເພື່ອເຮົາຈະໄດ້ຮຽນຮູ້ ແລະ ເຕີບໂຕ. ເຮົາສາມາດສະແດງຄວາມຮັກຂອງເຮົາຕໍ່ພະອົງ ຜ່ານການເລືອກ ແລະ ການເຊື່ອຟັງຂອງເຮົາຕໍ່ພະບັນຍັດຂອງພະອົງ.

ພະບິດາເທິງສະຫວັນໄດ້ຈັດຫາຊ່ອງທາງໄວ້ໃຫ້ເຮົາ, ຜູ້ທີ່ເປັນລູກໆຂອງພະອົງ, ເພື່ອຈະໄດ້ຮັບຜົນສຳເລັດໃນຊີວິດນີ້ ແລະ ເພື່ອຈະກັບໄປຢູ່ໃນທີ່ປະທັບຂອງພະອົງ. ເຖິງຢ່າງໃດກໍຕາມ, ເຮົາຕ້ອງບໍລິສຸດ ແລະ ສະອາດໂດຍຜ່ານການເຊື່ອຟັງ ເພື່ອຈະກັບໄປທີ່ນັ້ນ. ການບໍ່ເຊື່ອຟັງເຮັດໃຫ້ເຮົາຫ່າງເຫີນຈາກພະອົງ. ຈຸດສຳຄັນຂອງແຜນຂອງພະບິດາຂອງເຮົາ ແມ່ນການຊົດໃຊ້ຂອງພະເຢຊູຄຣິດ. ການຊົດໃຊ້ຮ່ວມດ້ວຍຄວາມທຸກທໍລະມານຂອງພະອົງໃນສວນ ເຄັດເຊມາເນ ເໝືອນກັນກັບຄວາມທຸກທໍລະມານຂອງພະອົງ ແລະ ການສິ້ນພະຊົນຂອງພະອົງເທິງໄມ້ກາງແຂນ. ຜ່ານການຊົດໃຊ້ ເຮົາຈະສາມາດມີອິດສະລະຈາກບາບທັງຫລາຍຂອງເຮົາ ແລະ ພັດທະນາສັດທາ ແລະ ພະລັງ ເພື່ອປະເຊີນໜ້າກັບການທົດສອບຂອງເຮົາ.

### ຄວາມເຊື່ອກ່ຽວກັບພະເຈົ້າ

ໃຫ້ໝັ້ນໃຈວ່າແຕ່ລະຄົນທີ່ທ່ານສອນເຂົ້າໃຈໃນເລື່ອງຄວາມເຊື່ອຂອງຄົນຄຣິດສະຕຽນກ່ຽວກັບພະເຈົ້າ. ຫລາຍຄົນໃນໂລກປະຈຸບັນນີ້ບໍ່ມີຄວາມຮູ້ກ່ຽວກັບພະເຈົ້າ ຫລື ມີຄວາມເຂົ້າໃຈທີ່ແຕກຕ່າງຫລາຍກ່ຽວກັບພະເຈົ້າ.

ຜູ້ສອນສາດສະໜາສອງຄົນໃນພະຄຳພີມໍມອນ, ແອມັນ ແລະ ອາໂລນ, ໄດ້ສອນຜູ້ຄົນທີ່ບໍ່ມີພື້ນຖານ ທີ່ເປັນຄຣິດສະຕຽນ. ເຂົາເຈົ້າໄດ້ສອນຄວາມຈິງທີ່ເຂົ້າໃຈງ່າຍໆ ແລະ ເຊື້ອເຊີນຜູ້ສົນໃຈຂອງເຂົາເຈົ້າ ໃຫ້ອະທິຖານ. ລາໂມໄນ ແລະ ພໍ່ຂອງເພິ່ນໄດ້ປ່ຽນໃຈເຫລື້ອມໃສ. ອ່ານ Alma 18:24–40 ແລະ 22:4–23, ແລະ ຕອບຄຳຖາມຂ້າງລຸ່ມນີ້:

- ຜູ້ສອນສາດສະໜາເຫລົ່ານີ້ໄດ້ສອນຫຍັງແດ່ກ່ຽວກັບລັກສະນະຂອງພະເຈົ້າ?
- ທ່ານຈະເຮັດຕາມຕົວຢ່າງຂອງເຂົາເຈົ້າໄດ້ແນວໃດ?

### ການສຶກສາພະຄຳພີ

**ແມ່ນຫຍັງຄືລັກສະນະຂອງພະເຈົ້າພະບິດາ ແລະ ພະເຢຊູຄຣິດ?**

| | | |
|---|---|---|
| 1 ນີໄຟ 17:36 | 3 ນີໄຟ 27:13–22 | ໂຢຮັນ 3:16–17 |
| 2 ນີໄຟ 9:6 | D&C 38:1–3 | ກິດຈະການ 17:27–29 |
| ໂມໄຊຢາ 4:9 | D&C 130:22 | ໂລມ 8:16 |
| 3 ນີໄຟ 12:48 | Moses 1:39 | ເຮັບເລີ 12:9 |
| 3 ນີໄຟ 14:9–11 | ມັດທາຍ 5:48 | 1 ໂຢຮັນ 4:7–9 |

## ພະກິດຕິຄຸນໃຫ້ພອນແກ່ຄອບຄົວ

ພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ໃຫ້ພອນ ແລະ ຊ່ອຍຜົວ ແລະ ເມຍ, ພໍ່ແມ່ ແລະ ລູກໆ ເມື່ອເຂົາພະຍາຍາມທີ່ຈະປັບປຸງຄວາມສຳພັນ ແລະ ເຮັດໃຫ້ພະລັງທາງວິນຍານເຂັ້ມແຂງຂຶ້ນ ໃນຄອບຄົວຂອງເຂົາ. ພອນເຫລົ່ານີ້ມີໃຫ້ດຽວນີ້ ແລະ ໃນຊົ່ວນິລັນດອນ. ພະກິດຕິຄຸນຂອງພະເຢຊູຄຣິດຈະຊ່ອຍເຫລືອນຳຄວາມເປັນຫ່ວງ ແລະ ສິ່ງທີ່ທ້າທາຍໃນປະຈຸບັນ.

ເພາະວ່າຄອບຄົວໄດ້ຖືກແຕ່ງຕັ້ງຂຶ້ນໂດຍພະເຈົ້າ, ຄອບຄົວຈຶ່ງເປັນສິ່ງສຳຄັນທີ່ສຸດໃນໜ່ວຍສັງຄົມໃນເວລານີ້ ແລະ ໃນຊົ່ວນິລັນດອນ. ພະເຈົ້າໄດ້ສ້າງຄອບຄົວເພື່ອໃຫ້ນຳຄວາມສຸກມາສູ່ລູກໆຂອງພະອົງ, ເພື່ອຈະໃຫ້ໂອກາດເຂົາຮຽນຮູ້ຫລັກທຳທີ່ຖືກຕ້ອງໃນສະພາບແວດລ້ອມທີ່ເຕັມໄປດ້ວຍຄວາມຮັກ, ແລະ ເພື່ອຕຽມຕົວເຂົາໃຫ້ມີຊີວິດນິລັນດອນ. ບ້ານເປັນບ່ອນທີ່ດີທີ່ສຸດທີ່ຈະສອນ, ຮຽນຮູ້, ແລະ ໃຊ້ຫລັກທຳພະກິດຕິຄຸນຂອງພະເຢຊູຄຣິດ. ບ້ານທີ່ຕັ້ງຂຶ້ນເທິງພື້ນຖານຂອງຫລັກທຳພະກິດຕິຄຸນ ຈະເປັນບ່ອນເພິ່ງພາ ແລະ ປອດໄພ. ບ້ານ ຈະເປັນບ່ອນທີ່ພະວິນຍານຂອງພະຜູ້ເປັນເຈົ້າສາມາດອາໄສຢູ່, ແລະ ຈະໃຫ້ພອນແກ່ສະມາຊິກໃນຄອບຄົວ ດ້ວຍຄວາມສະຫງົບ, ມ່ວນຊື່ນ, ແລະ ຜາສຸກ. ຜ່ານສາດສະດາທັງຫລາຍໃນທຸກຍຸກທຸກສະໄໝ, ຮ່ວມດ້ວຍສະໄໝຂອງເຮົາເອງ, ພະເຈົ້າໄດ້ເປີດເຜີຍແຜນແຫ່ງຄວາມສຸກຂອງພະອົງສຳລັບແຕ່ລະຄົນ ແລະ ຄອບຄົວ.

ໝາຍເຫດ

## ພະບິດາເທິງສະຫວັນເປີດເຜີຍພະກິດຕິຄຸນຂອງພະອົງໃນທຸກຍຸກທຸກສະໄໝ

ຢ່າງໜຶ່ງທີ່ສຳຄັນທີ່ພະເຈົ້າສະແດງເຖິງຄວາມຮັກຂອງພະອົງທີ່ມີຕໍ່ເຮົາ ແມ່ນການເອີ້ນສາດສະດາທັງຫລາຍ, ຜູ້ທີ່ໄດ້ຮັບຖານະປະໂລຫິດ—ຊຶ່ງແມ່ນພະລັງ ແລະ ອຳນາດ ທີ່ໄດ້ມອບໃຫ້ມະນຸດເພື່ອຈະເຮັດໜ້າທີ່ໃນນາມຂອງພະເຈົ້າ ເພື່ອຄວາມລອດຂອງລູກໆຂອງພະອົງ. ສາດສະດາທັງຫລາຍຮຽນຮູ້ພະກິດຕິຄຸນຂອງພະເຢຊູຄິດໂດຍການເປີດເຜີຍ. ຕໍ່ມາເຂົາເຈົ້າສອນພະກິດຕິຄຸນໃຫ້ແກ່ຄົນອື່ນໆ ແລະ ສະແດງປະຈັກພະຍານເຖິງ ພະເຢຊູຄິດວ່າພະອົງເປັນພະຜູ້ຊ່ອຍໃຫ້ລອດ ແລະ ເປັນພະຜູ້ໄຖ່. ຄຳສອນຂອງສາດສະດາທັງຫລາຍໄດ້ມີ ຢູ່ໃນໜັງສືທີ່ສັກສິດເອີ້ນວ່າ ພະຄຳພີ.

ແຜນຂອງພະບິດາຂອງເຮົາເພື່ອໃຫ້ເຮົາມີຄວາມສຳເລັດໃນຊີວິດນີ້ ແລະ ກັບຄືນໄປຢູ່ກັບພະອົງ ເອີ້ນວ່າພະກິດຕິຄຸນຂອງພະເຢຊູຄິດ, ດ້ວຍການຊົດໃຊ້ຂອງພະເຢຊູເປັນສູນກາງຂອງແຜນນັ້ນ. ຜ່ານການຊົດໃຊ້ຂອງພະເຢຊູຄິດ, ເຮົາສາມາດຮັບຊີວິດນິລັນດອນ ຖ້າວ່າເຮົາໃຊ້ສັດທາໃນພະເຢຊູຄິດ, ກັບໃຈ, ຮັບພິທີບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວເພື່ອການປົດບາບ, ຮັບຂອງປະທານແຫ່ງພະວິນຍານບໍລິສຸດ, ແລະ ອົດທົນຈົນເຖິງທີ່ສຸດ. "ນີ້ຄືທາງນັ້ນ ແລະບໍ່ມີທາງ ຫລືນາມອື່ນໃດປະທານ ພາຍໃຕ້ສະຫວັນເລີຍ ຊຶ່ງໂດຍທາງນັ້ນມະນຸດຈະລອດໄດ້ໃນອານາຈັກຂອງພະເຈົ້າ. ແລະ ບັດນີ້ ຈົ່ງເບິ່ງ ນີ້ຄືຄຳສອນຂອງພະຄິດ" (2 ນີໄຟ 31:21). ທຸກໆຄົນມີສິດທີ່ຈະເລືອກເພື່ອຕົວເອງ, ຊຶ່ງຮ່ວມດ້ວຍອິດສະລະທີ່ຈະຍອມຮັບ ຫລື ປະຕິເສດ ພະກິດຕິຄຸນທີ່ໄດ້ສອນໂດຍສາດສະດາ ແລະ ອັກຄະສາວົກທັງຫລາຍ. ຄົນທີ່ເລືອກເຊື່ອຟັງໄດ້ຈະຮັບພອນ, ແຕ່ຄົນທີ່ບໍ່ສົນໃຈ, ປະຕິເສດ, ຫລື ບິດເບືອນພະກິດຕິຄຸນ ຈະບໍ່ໄດ້ຮັບພອນທີ່ພະເຈົ້າໄດ້ສັນຍາໄວ້.

ເວລາໃດຄົນເລືອກບໍ່ສົນໃຈ, ບໍ່ເຊື່ອຟັງ, ຫລື ບິດເບືອນ ຫລັກທຳພະກິດຕິຄຸນ ຫລື ພິທີການ, ເວລາໃດທີ່ເຂົາປະຕິເສດສາດສະດາຂອງພະຜູ້ເປັນເຈົ້າ, ຫລື ເວລາໃດທີ່ເຂົາບໍ່ອົດທົນໃນສັດທາ, ເຂົາໄດ້ຫ່າງເຫີນໄປຈາກພະເຈົ້າ ແລະ ເລີ່ມດຳລົງຊີວິດຢູ່ໃນຄວາມມືດມົວທາງວິນຍານ. ໃນທີ່ສຸດ ສິ່ງນີ້ຈະນຳໄປສູ່ສະພາບທີ່ເອີ້ນວ່າ ການປະຖິ້ມຄວາມເຊື່ອ. ເມື່ອການປະຖິ້ມຄວາມເຊື່ອໄດ້ແຜ່ຂະຫຍາຍອອກໄປ, ພະເຈົ້າໄດ້ຖອນອຳນາດຂອງຖານະປະໂລຫິດຂອງພະອົງໃນການສອນ ແລະ ໃນການປະຕິບັດພິທີການຂອງພະກິດຕິຄຸນໄປເສຍ.



ປະຫວັດສາດກ່ຽວກັບພະຄິດຕະທຳຄຳພີໄດ້ບັນທຶກຫລາຍໆຕົວຢ່າງທີ່ພະເຈົ້າກ່າວຕໍ່ສາດສະດາທັງຫລາຍ, ແລະ ໄດ້ບອກເຖິງຕົວຢ່າງຂອງການປະຖິ້ມຄວາມເຊື່ອ. ເພື່ອໃຫ້ແຕ່ລະຍະເວລາທີ່ມີການປະຖິ້ມຄວາມເຊື່ອຂອງຜູ້ຄົນທັງຫລາຍຈົບລົງ, ພະເຈົ້າໄດ້ສະແດງຄວາມຮັກຕໍ່ລູກໆຂອງພະອົງໂດຍການເອີ້ນສາດສະດາອີກຄົນໜຶ່ງ ແລະ ໄດ້ມອບອຳນາດຖານະປະໂລຫິດໃຫ້ເພິ່ນ ເພື່ອຟື້ນຟູ ແລະ ສອນພະກິດຕິຄຸນຂອງພະເຢຊູຄິດອີກ ຄັ້ງໜຶ່ງ. ແຫ້ງແລ້ວ, ສາດສະດາເປັນຜູ້ຮັບຜິດຊອບຕໍ່ພາລະກິດເພື່ອຈະຄວບຄຸມອານາຈັກຂອງພະເຈົ້າຢູ່ໃນໂລກນີ້. ຊ່ວງເວລາເຫລົ່ານີ້ທີ່ປົກຄອງໂດຍສາດສະດາເອີ້ນວ່າ ສະໄໝ.

ພະເຈົ້າໄດ້ເປີດເຜີຍພະກິດຕິຄຸນຂອງພະເຢຊູຄິດແກ່ອາດາມ ແລະ ໄດ້ມອບອຳນາດຖານະປະໂລຫິດໃຫ້ລາວ. ອາດາມເປັນສາດສະດາຜູ້ທຳອິດໃນໂລກ. ໂດຍການເປີດເຜີຍ, ອາດາມໄດ້ຮຽນຮູ້ຄວາມສຳພັນທີ່ເໝາະສົມຂອງມະນຸດກັບພະເຈົ້າອົງພະບິດາ, ພະເຢຊູຄິດພະບຸດຂອງພະອົງ, ແລະ ພະວິນຍານບໍລິສຸດ; ໄດ້ຮຽນຮູ້ເຖິງການຊົດໃຊ້ ແລະ ຄວາມເປັນຄືນມາຈາກຕາຍຂອງພະເຢຊູຄິດ; ແລະ ໄດ້ຮຽນຮູ້ເຖິງຫລັກທຳ ແລະ ພິທີການເບື້ອງຕົ້ນແຫ່ງພະກິດຕິຄຸນ. ອາດາມ ແລະ ເອວາ ໄດ້ສອນລູກໆຂອງເຂົາເຈົ້າເຖິງຄວາມຈິງເຫລົ່ານີ້ ແລະ ຊຸກຍູ້ເຂົາໃຫ້ພັດທະນາສັດທາ ແລະ ດຳລົງຊີວິດໃນພະກິດຕິຄຸນ ໃນທຸກຊ່ວງຊີວິດຂອງເຂົາ. ສາດສະດາຄົນອື່ນໆໄດ້ຕິດຕາມອາດາມ, ແຕ່ເວລາຜ່ານໄປ ລູກຫລານຂອງອາດາມໄດ້ປະຕິເສດພະກິດຕິຄຸນ ແລະ ໄດ້ຕົກຢູ່ໃນການປະຖິ້ມຄວາມເຊື່ອ, ເລືອກທີ່ຈະບໍ່ເປັນຄົນຊອບທຳ.

ເພາະສະນັ້ນ ຈຶ່ງມີການເລີ່ມຕົ້ນຂອງສະໄໝສາດສະດາ ຊຶ່ງມີຢູ່ໃນປະຫວັດສາດທີ່ຂຽນໄວ້ໃນພະຄຳພີເດີມ. ພະບິດາເທິງສະຫວັນໄດ້ເປີດເຜີຍພະກິດຕິຄຸນຂອງພະອົງຜ່ານການຕິດຕໍ່ໂດຍກົງກັບສາດສະດາທັງຫລາຍເຊັ່ນ

ໝາຍເຫດ

ໂນອາ, ອັບລາຣາມ, ແລະ ໂມເຊ. ສາດສະດາແຕ່ລະຄົນໄດ້ຖືກເອີ້ນໂດຍພະເຈົ້າ ເພື່ອເລີ່ມຕົ້ນ ສະໄໝໃໝ່ຂອງພະກິດຕິຄຸນ. ພະເຈົ້າໄດ້ມອບອຳນາດຖານະປະໂລຫິດໃຫ້ແກ່ສາດສະດາແຕ່ລະຄົນ ແລະ ໄດ້ເປີດເຜີຍຄວາມຈິງນິລັນດອນ. ແຕ່ໜ້າເສຍດາຍ ທີ່ແຕ່ລະສະໄໝ ຜູ້ຄົນໄດ້ໃຊ້ສິດທິທີ່ຈະເລືອກ ປະຕິເສດພະກິດຕິຄຸນ ແລະ ຕົກຢູ່ໃນການປະຖິ້ມຄວາມເຊື່ອໃນທີ່ສຸດ.

## ສາດສະດາທັງຫລາຍ

ໃຫ້ໝັ້ນໃຈວ່າຄົນທີ່ທ່ານສອນເຂົ້າໃຈກ່ຽວກັບສາດສະດາທັງຫລາຍ. ໃນວັດທະນະທຳສ່ວນຫລາຍ ມີຄົນທີ່ ເຊື່ອວ່າຜູ້ທີ່ສັກສິດ ຫລື ຜູ້ທີ່ໄດ້ຮັບການດົນໃຈ ໄດ້ຮັບການນຳທາງຢ່າງໃດຢ່າງໜຶ່ງ ແລະ ໄດ້ຮັບຄຳແນະນຳຈາກພະເຈົ້າ. ເຖິງຢ່າງໃດກໍຕາມ, ເຊິ່ງໄດ້ບອກຢູ່ໃນພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່, ຄົນທີ່ໄດ້ຮັບການດົນໃຈບໍ່ແມ່ນວ່າຈະເປັນສາດສະດາຂອງພະເຈົ້າໝົດ. ໃຫ້ອະທິບາຍຢ່າງແຈ່ມແຈ້ງວ່າ ພະເຈົ້າສ້າງຕັ້ງອານາຈັກຂອງພະອົງໃນໂລກໂດຍການເອີ້ນສາດສະດາຄົນໜຶ່ງໃຫ້ສ້າງສະໄໝໃໝ່ຂຶ້ນ. ພະອົງໄດ້ມອບອຳນາດຖານະປະໂລຫິດໃຫ້ແກ່ສາດສະດາຄົນນັ້ນ. ຕໍ່ມາສາດສະດາໄດ້ຊ່ອຍໃຫ້ຜູ້ຄົນ ເຂົ້າໃຈຄວາມສຳພັນຂອງເຂົາເຈົ້າຕໍ່ພະເຈົ້າ, ຮ່ວມດ້ວຍວິທີທີ່ຈະໄດ້ຮັບຊີວິດນິລັນດອນ ໂດຍຜ່ານພະກິດຕິຄຸນຂອງພະເຢຊູຄຣິດ.

ບາງທີທ່ານອາດຈະລົງໄສວ່າສະໄໝພະກິດຕິຄຸນມີຄວາມກ່ຽວຂ້ອງແນວໃດ ເມື່ອສອນຄົນທີ່ບໍ່ມີພື້ນຖານ ຄິດສະຕຽນ ຫລື ບໍ່ມາຈາກວັດທະນຳທຳຄິດສະຕຽນ. ແຕ່ທ່ານຈະພົບວ່າໂດຍເວົ້າເລື່ອງປະຫວັດສາດຂອງສະໄໝພະກິດຕິຄຸນ, ທ່ານຈະຊ່ອຍຜູ້ຄົນໃຫ້ເຂົ້າໃຈວ່າ ພະເຈົ້າຮັກລູກໆຂອງພະອົງ ແລະ ວ່າພະອົງຍັງເໝືອນເດີມໃນມື້ວານນີ້, ວັນນີ້, ແລະ ຕະຫລອດໄປ.

## ການສຶກສາພະຄຳພີ

### ສາດສະດາທັງຫລາຍ

Jacob 4:4, 6
ກິດຈະການ 10:34–43
ອາໂມດ 3:7
ໂມໄຊຢາ 8:13–18

### ສະໄໝ

D&C 136:36–38
Moses 8:19–30
Bible Dictionary, "Dispensations"
ໂມເຊ 5.4–12, 55–59

## ພາລະກິດຂອງພະຜູ້ຊ່ອຍໃຫ້ລອດໃນໂລກ

ສອງສາມຮ້ອຍປີ ກ່ອນການປະສູດຂອງພະເຢຊູຄຣິດ, ຜູ້ຄົນໄດ້ຕົກຢູ່ໃນການປະຖິ້ມຄວາມເຊື່ອ. ແຕ່ວ່າເມື່ອພະຜູ້ຊ່ອຍໃຫ້ລອດໄດ້ເລີ່ມຕົ້ນພາລະກິດອັນມະຕະຂອງພະອົງແລ້ວ ພະອົງໄດ້ສ້າງຕັ້ງສາດສະໜາຈັກ ຂອງພະອົງຂຶ້ນໃນໂລກອີກຄັ້ງໜຶ່ງ.

ພະບິດາເທິງສະຫວັນໄດ້ສົ່ງພະບຸດຂອງພະອົງມາໃນໂລກ ເພື່ອຊົດໃຊ້ບາບຂອງມະນຸດ ແລະ ເອົາຊະນະຄວາມຕາຍ: "ເພາະພະເຈົ້າຮັກໂລກຫລາຍແທ້ ຈົນໄດ້ປະທານພະບຸດອົງດຽວຂອງພະອົງເພື່ອວ່າ . . . ມາເປັນພະຜູ້ໂຜດຊ່ອຍໂລກ" (ໂຢຮັນ 3:16–17). ພະບິດາເທິງສະຫວັນຂອງເຮົາໄດ້ສົ່ງພະບຸດຂອງພະອົງ, ເຊິ່ງແມ່ນພະເຢຊູຄຣິດ, ເພື່ອຈະຮັບເອົາບາບທັງຫລາຍຂອງທຸກໆຄົນທີ່ເກີດມາໃນໂລກນີ້ ແລະ ຊະນະຄວາມຕາຍທາງຮ່າງກາຍ ໂດຍຜ່ານຄວາມທຸກທໍລະມານຂອງພະອົງ. ພະຜູ້ຊ່ອຍໃຫ້ລອດໄດ້ກະທຳການຊົດໃຊ້ເຊິ່ງແມ່ນການເສຍສະລະທີ່ໃຫຍ່ຫລວງ ຖ້າເຮົາມີສັດທາໃນພະອົງ, ກັບໃຈ, ຮັບບັບຕິດສະມາ, ຮັບພະວິນຍານບໍລິສຸດ, ແລະ ອົດທົນຈົນເຖິງທີ່ສຸດ, ເຮົາຈະສາມາດໄດ້ຮັບການໃຫ້ອະໄພບາບຂອງເຮົາ ແລະ ເຂົ້າໄປ ແລະ ເຮັດຕາມທາງທີ່ຈະນຳເຮົາໄປສູ່ຊີວິດນິລັນດອນ ໃນທີ່ປະທັບຂອງພະເຈົ້າ. (ເບິ່ງ 2 ນີໄຟ 31:13–21).

ໝາຍເຫດ



ໃນລະຫວ່າງຕອນເລີ່ມຕົ້ນພາລະກິດຂອງພະອົງໃນໂລກ, ພະຜູ້ຊ່ອຍໃຫ້ລອດໄດ້ສອນພະກິດຕິຄຸນຂອງພະອົງ ແລະ ໄດ້ກະທຳສິ່ງມະຫັດສະຈັນຫລາຍໆຢ່າງ. ພະອົງໄດ້ເອີ້ນຊາຍສິບສອງຄົນໃຫ້ເປັນອັກຄະສາວົກຂອງພະອົງ ແລະ ໄດ້ວາງມືເທິງຫົວຂອງເຂົາ ເພື່ອມອບອຳນາດຖານະປະໂລຫິດໃຫ້ແກ່ເຂົາ. ພະອົງໄດ້ສ້າງຕັ້ງສາດສະໜາຈັກຂອງພະອົງຂຶ້ນ, ໄດ້ເຮັດໃຫ້ການພະຍາກອນສຳເລັດ, ແລະ ໄດ້ຖືກປະຕິເສດ ແລະ ໄດ້ຖືກຄຶງໄວ້ເທິງໄມ້ກາງແຂນ. ແຕ່ສິ່ງທີ່ສຳຄັນທີ່ສຸດ ພະອົງໄດ້ກະທຳການຊົດໃຊ້ຢ່າງສົມບູນ. ພະບຸດຂອງພະເຈົ້າ, ພະຜູ້ເປັນເຈົ້າ ພະເຢຊູຄຣິດ, ໄດ້ເຮັດໜ້າທີ່ທັງໝົດທີ່ພະບິດາເທິງສະຫວັນໄດ້ສົ່ງພະອົງມາເຮັດ.

ກ່ອນທີ່ພະຜູ້ຊ່ອຍໃຫ້ລອດສິ້ນພະຊົນ ແລະ ຄືນມາຈາກຕາຍ, ພະອົງໄດ້ມອບອຳນາດໃຫ້ແກ່ອັກຄະສາວົກເພື່ອສອນພະກິດຕິຄຸນຂອງພະອົງ, ປະກອບພິທີການແຫ່ງຄວາມລອດ, ແລະ ສ້າງຕັ້ງສາດສະໜາຈັກຂອງພະອົງໃນທົ່ວໂລກ.

### ການສຶກສາພະຄຳພີ

| | | |
|---|---|---|
| ຫລັກແຫ່ງຄວາມເຊື່ອ 1:5 | ລູກາ 6:13 | ເຮັບເລີ 5:4 |
| ມັດທາຍ 10:1–10 | ໂຢຮັນ 15:16 | |

## ການປະຖິ້ມຄວາມເຊື່ອທີ່ຍິ່ງໃຫຍ່

ຫລັງຈາກການສິ້ນພະຊົນຂອງພະເຢຊູຄຣິດ, ຄົນຊົ່ວຮ້າຍໄດ້ຂົ່ມເຫັງອັກຄະສາວົກ ແລະ ສະມາຊິກຂອງສາດສະໜາຈັກ ແລະ ໄດ້ຂ້າຫລາຍຄົນ. ດ້ວຍການຕາຍຂອງອັກຄະສາວົກທັງຫລາຍ, ຂໍກະແຈຂອງຖານະປະໂລຫິດ ແລະ ອຳນາດຖານະປະໂລຫິດເພື່ອປົກຄອງ ໄດ້ຫາຍສາບສູນໄປຈາກໂລກ. ອັກຄະສາວົກໄດ້ຮັກສາຄຳສອນຂອງພະກິດຕິຄຸນໃຫ້ບໍລິສຸດ ແລະ ຮັກສາລະບຽບ ແລະ ຕັ້ງມາດຕະຖານໄວ້ສຳລັບຄວາມມີຄ່າຄວນສຳລັບສະມາຊິກໃນສາດສະໜາຈັກ. ປາດສະຈາກອັກຄະສາວົກແລ້ວ, ເວລາຜ່ານໄປ ຄຳສອນໄດ້ເສື່ອມຊາມລົງ, ແລະ ການປ່ຽນແປງທີ່ບໍ່ໄດ້ຮັບອະນຸຍາດໄດ້ເກີດຂຶ້ນ ໃນການຈັດຕັ້ງຂອງສາດສະໜາຈັກ ແລະ ພິທີການຂອງຖານະປະໂລຫິດເຊັ່ນພິທີບັບຕິສະມາ ແລະ ພິທີມອບຂອງປະທານແຫ່ງພະວິນຍານບໍລິສຸດ.

ປາດສະຈາກການເປີດເຜີຍ ແລະ ອຳນາດຖານະປະໂລຫິດ, ຜູ້ຄົນໄດ້ອາໄສຄວາມສະຫລາດຂອງມະນຸດເພື່ອຈະຕີຄວາມໝາຍຂອງພະຄຳພີ ແລະ ຫລັກທຳ ແລະ ພິທີການຂອງພະກິດຕິຄຸນຂອງພະເຢຊູຄຣິດ. ແນວຄິດທີ່ຜິດໄດ້ຖືກສອນໃຫ້ກາຍເປັນຄວາມຈິງ. ຄວາມຮູ້ສ່ວນຫລາຍກ່ຽວກັບລັກສະນະທີ່ແທ້ຈິງ ຂອງພະເຈົ້າອົງພະບິດາ, ຂອງພະບຸດຂອງພະອົງ ພະເຢຊູຄຣິດ, ແລະ ຂອງພະວິນຍານບໍລິສຸດ ໄດ້ເສຍໄປ. ຄຳສອນກ່ຽວກັບສັດທາໃນພະເຢຊູຄຣິດ, ການກັບໃຈ, ພິທີບັບຕິສະມາ, ແລະ ຂອງປະທານແຫ່ງພະວິນຍານບໍລິສຸດ ໄດ້ຖືກບິດເບືອນຈາກຄວາມເປັນຈິງ ຫລື ໄດ້ຖືກລືມ. ອຳນາດຖານະປະໂລຫິດທີ່ໄດ້ມອບໃຫ້ແກ່ອັກຄະສາວົກຂອງພະຄຣິດ ບໍ່ມີຢູ່ໃນໂລກອີກຕໍ່ໄປ. ຕໍ່ມາ ການປະຖິ້ມຄວາມເຊື່ອນີ້ໄດ້ນຳໄປສູ່ການເຕີບໃຫຍ່ຂອງສາດສະໜາຈັກອື່ນໆ.

ຫລັງຈາກຫລາຍຮ້ອຍປີທີ່ມີຄວາມມືດມົວທາງດ້ານວິນຍານ, ຊາຍ ແລະ ຍິງ ຜູ້ທີ່ຊອກຫາຄວາມຈິງ ໄດ້ຄັດຄ້ານຕໍ່ການປະຕິບັດກ່ຽວກັບທາງສາດສະໜາໃນຕອນນັ້ນ. ເຂົາເຈົ້າໄດ້ຮູ້ວ່າຫລັກທຳ ແລະ ພິທີການຕ່າງໆຂອງພະກິດຕິຄຸນໄດ້ຖືກປ່ຽນແປງຫລືເສຍໄປ. ເຂົາເຈົ້າໄດ້ຄົ້ນຫາແສງສະຫວ່າງທາງວິນຍານ, ແລະ ຫລາຍໆຄົນໄດ້ກ່າວເຖິງຄວາມຕ້ອງການທີ່ຈະຟື້ນຟູຄວາມຈິງ. ເຖິງຢ່າງໃດກໍຕາມ ເຂົາເຈົ້າບໍ່ໄດ້ປະກາດວ່າພະເຈົ້າ ໄດ້ເອີ້ນເຂົາເຈົ້າໃຫ້ເປັນສາດສະດາ. ເຂົາເຈົ້າພະຍາຍາມສ້າງຕັ້ງການສອນ ແລະ ພາກປະຕິບັດເຊິ່ງເຂົາເຈົ້າ ເຊື່ອວ່າແຕ່ກ່ອນໄດ້ຖືກປ່ຽນແປງ ຫລື ເສື່ອມຊາມ. ຄວາມພະຍາຍາມຂອງເຂົາເຈົ້າໄດ້ນຳໄປສູ່ການຈັດຕັ້ງຂອງຫລາຍໆສາດສະໜາຈັກປະໂລແຕສະຕັງ. ຜົນຂອງການຈັດຕັ້ງນີ້ໄດ້ເຮັດໃຫ້ເກີດມີການເນັ້ນໜັກຫລາຍຂຶ້ນ ກ່ຽວກັບອິດສະລະພາບທາງສາດສະໜາ ເຊິ່ງໄດ້ເປີດຫົນທາງໃຫ້ມີການຟື້ນຟູອັນສຸດທ້າຍເກີດຂຶ້ນ.

ໝາຍເຫດ

ອັກຄະສາວົກຂອງພະຜູ້ຊ່ອຍໃຫ້ລອດໄດ້ທຳນາຍການປະຖິ້ມຄວາມເຊື່ອທົ່ວໆໄປນີ້. ເຂົາເຈົ້າຍັງໄດ້ທຳນາຍວ່າ ພະກິດຕິຄຸນຂອງພະເຢຊູຄຣິດ ແລະ ສາດສະໜາຈັກຂອງພະອົງ ຈະໄດ້ຖືກຟື້ນຟູຄືນມາໃໝ່ອີກຄັ້ງໜຶ່ງໃນໂລກ.

## ການສຶກສາພະຄຳພີ

| | | |
|---|---|---|
| 1 Nephi 13 | ກິດຈະການ 3:19–21 | 2 ເປໂຕ 2:1–2 |
| 2 Nephi 26:20–21 | ກິດຈະການ 20:28–30 | ອາໂມດ 8:11–12 |
| 2 Nephi 28 | ຄາລາເຕຍ 1:6–9 | Topical Guide: "Apostasy of the Early Christian Church" |
| 4 ນີໄຟ 1:27 | 2 ເທຊະໂລນິກ 2:1–12 | *True to the Faith*, pages 13–14 |
| D&C 86:1–3 | (JST verses 2, 3, 7–9) | *Our Search for Happiness*, pages 23–32 |
| ມັດທາຍ 24:9–11 | 1 ຕີໂມທີ 4:1–3 | *Jesus the Christ*, chapter 40, |
| ມາລະໂກ 12:1–9 | 2 ຕີໂມທີ 4:3–4 | "The Long Night of Apostasy" |

## ການປະຖິ້ມຄວາມເຊື່ອທີ່ຍິ່ງໃຫຍ່

ຜູ້ສົນໃຈຕ້ອງເຂົ້າໃຈວ່າການປະຖິ້ມຄວາມເຊື່ອທົ່ວໆໄປ ໄດ້ເກີດຂຶ້ນຫລັງຈາກການສິ້ນພະຊົນຂອງພະເຢຊູຄຣິດ ແລະ ອັກຄະສາວົກຂອງພະອົງ. ຖ້າວ່າບໍ່ມີການປະຖິ້ມຄວາມເຊື່ອນັ້ນແລ້ວ, ຈະບໍ່ມີຄວາມຈຳເປັນທີ່ຈະຟື້ນຟູ. ເໝືອນກັນກັບເພັດທີ່ໄດ້ວາງໄວ້ຢູ່ເທິງຜ້າກຳມະຫຍີ່ສີດຳ ມັນເບິ່ງຄືວ່າສຸກໃສຫລາຍຂຶ້ນ, ການຟື້ນຟູກໍຄືກັນ ຈະເດັ່ນຂຶ້ນຖ້າປຽບທຽບກັບພື້ນຖານຄວາມມືດມົວຂອງການປະຖິ້ມຄວາມເຊື່ອທີ່ຍິ່ງໃຫຍ່. ເມື່ອໄດ້ຖືກນຳທາງໂດຍພະວິນຍານ, ໃຫ້ສອນຜູ້ສົນໃຈກ່ຽວກັບເລື່ອງການປະຖິ້ມຄວາມເຊື່ອທີ່ຍິ່ງໃຫຍ່ ໃນລະດັບທີ່ເໝາະສົມກັບຄວາມຕ້ອງການ ແລະ ສະພາບການຂອງເຂົາເຈົ້າ. ຈຸດປະສົງຂອງທ່ານ ແມ່ນເພື່ອຊ່ອຍເຂົາເຈົ້າໃຫ້ເຂົ້າໃຈຄວາມຈຳເປັນທີ່ຈະຟື້ນຟູພະກິດຕິຄຸນຂອງພະເຢຊູຄຣິດຄືນມາໃໝ່.

### ຈຸດສຳຄັນ

- ສາດສະໜາຈັກຂອງພະເຢຊູຄຣິດໄດ້ສ້າງຂຶ້ນເທິງພື້ນຖານຂອງອັກຄະສາວົກ ແລະ ສາດສະດາ (ເບິ່ງ ເອເຟໂຊ 2:19–20; 4:11–14). ຜູ້ນຳທັງຫລາຍເຫລົ່ານີ້ມີອຳນາດຖານະປະໂລຫິດອັນສັກສິດ. ໂດຍຜ່ານການເປີດເຜີຍ ເຂົາເຈົ້າເປັນຜູ້ຊີ້ນຳວຽກງານຂອງສາດສະໜາຈັກ. ເຂົາເຈົ້າຮັກສາຄຳສອນໃຫ້ບໍລິສຸດ, ໃຫ້ອະນຸຍາດການປະກອບພິທີການຕ່າງໆ, ເອີ້ນ ແລະ ມອບອຳນາດຖານະປະໂລຫິດໃຫ້ແກ່ຄົນອື່ນໆ.
- ຜູ້ຄົນໄດ້ປະຕິເສດ ແລະ ຂ້າພະເຢຊູຄຣິດ ແລະ ອັກຄະສາວົກ (ເບິ່ງ ມັດທາຍ 24:9; 1 Nephi 11:32–34; 2 Nephi 27:5). ເມື່ອອັກຄະສາວົກຕາຍແລ້ວ, ອຳນາດຖານະປະໂລຫິດເພື່ອຈະປົກຄອງໄດ້ສູນຫາຍໄປຈາກສາດສະໜາຈັກ. ດັ່ງນັ້ນ, ບໍ່ມີອຳນາດເພື່ອຈະມອບພະວິນຍານບໍລິສຸດ ຫລື ປະກອບພິທີການແຫ່ງຄວາມລອດຕ່າງໆ. ການເປີດເຜີຍໄດ້ສິ້ນສຸດລົງ ແລະ ຄຳສອນໄດ້ຖືກເສື່ອມຊາມລົງ.
- ເຖິງແມ່ນກ່ອນອັກຄະສາວົກຕາຍ, ການຄັດແຍ້ງຫລາຍຢ່າງກ່ຽວກັບຄຳສອນໄດ້ເກີດຂຶ້ນ. ຈັກກະພັດໂລມ, ເຊິ່ງຕອນຕົ້ນໄດ້ຂົ່ມເຫັງຊາວຄຣິດສະຕຽນ, ແຕ່ຕໍ່ມາໄດ້ຮັບເອົາສາດສະໜາພະຄຣິດ. ຄຳຖາມສຳຄັນກ່ຽວກັບສາດສະໜາໄດ້ຕົກລົງໂດຍສະພາ. ຄຳສອນທີ່ເຂົ້າໃຈງ່າຍ ແລະ ພິທີການຕ່າງໆ ທີ່ໄດ້ຖືກສອນໂດຍພະຜູ້ຊ່ອຍໃຫ້ລອດໄດ້ມີການໂຕ້ຖຽງ ແລະ ປ່ຽນແປງ ເພື່ອຈະປັບຕົວໃຫ້ເຂົ້າກັບປັດຊະຍາທາງໂລກ (ເບິ່ງ ເອຊາຢາ 24:5). ເຂົາເຈົ້າໄດ້ປ່ຽນແປງພະຄຳພີ, ເຂົາເຈົ້າໄດ້ເອົາຄຳສອນທີ່ແຈ້ງ ແລະ ລ້ຳຄ່າອອກຈາກພະຄຳພີ (1 Nephi 13:26–40). ເຂົາເຈົ້າໄດ້ຈັດສ້າງຄຳຖະແຫລງຄວາມເຊື່ອຖືທາງສາດສະໜາ ຢູ່ເທິງພື້ນຖານຂອງຄຳສອນທີ່ບໍ່ຖືກຕ້ອງ ແລະ ຖືກປ່ຽນແປງ (see Joseph Smith—History 1:19). ເພາະດ້ວຍຄວາມຈອງຫອງ, ບາງຄົນສະແຫວງຫາຕຳແໜ່ງທີ່ມີອິດທິພົນ (ເບິ່ງ 3 ໂຢຮັນ 1:9–10). ຜູ້ຄົນຍອມຮັບແນວຄິດທີ່ຜິດ ແລະ ໃຫ້ກຽດຄູຜູ້ທີ່ສອນ ເພື່ອຈະໃຫ້ຄຳສອນທີ່ມ່ວນແທນທີ່ຈະສອນດ້ວຍ ຄວາມຈິງທີ່ສັກສິດ (ເບິ່ງ 2 ຕີໂມທີ 4:3–4).
- ຕະຫລອດປະຫວັດສາດ, ຫລາຍໆຄົນມີຄວາມເຊື່ອຢ່າງຈິງໃຈໃນສາດສະໜາ ແລະ ຄຳສອນທີ່ຜິດ. ເຂົາເຈົ້າໄດ້ນະມັດສະການຕາມຄວາມເຊື່ອທີ່ເຂົາເຈົ້າມີ ແລະ ໄດ້ຮັບຄຳຕອບຕໍ່ຄຳອະທິຖານຂອງເຂົາເຈົ້າ. ແຕ່ວ່າເຂົາເຈົ້າ "ຖືກກັນໄວ້ຈາກຄວາມຈິງເພາະເຂົາເຈົ້າບໍ່ຮູ້ວ່າຈະພົບມັນຢູ່ໃສ" (see D&C 123:12).

ໝາຍເຫດ

- ເພາະສະນັ້ນ, ການຟື້ນຟູ, ເຊິ່ງບໍ່ແມ່ນການແກ້ໄຂໃຫ້ດີຂຶ້ນເທົ່ານັ້ນ, ຕ້ອງມີຂຶ້ນ. ອຳນາດຖານະປະໂລຫິດບໍ່ໄດ້ດຳເນີນຕໍ່ໄປໃນເຊື້ອສາຍທີ່ບໍ່ແຕກຫັກຂອງການຕໍ່ເນື່ອງຈາກອັກຄະສາວົກ ເປໂຕ. ການແກ້ໄຂໃຫ້ດີຂຶ້ນແມ່ນການປ່ຽນແປງສິ່ງທີ່ມີຢູ່; ການຟື້ນຟູແມ່ນການກັບຄືນມາຂອງບາງສິ່ງທີ່ເປັນຂອງແທ້. ເພາະສະນັ້ນ ການຟື້ນຟູແຫ່ງອຳນາດຖານະປະໂລຫິດຜ່ານທູດສະຫວັນເປັນວິທີດຽວທີ່ຈະເອົາ ຊະນະການປະຖິ້ມຄວາມເຊື່ອທີ່ຍິ່ງໃຫຍ່ໄດ້.

## ການຟື້ນຟູພະກິດຕິຄຸນຂອງພະເຢຊູຄຣິດຜ່ານ ໂຢເຊັບ ສະມິດ

ເມື່ອສະພາບການເໝາະສົມ, ພະບິດາເທິງສະຫວັນໄດ້ຕິດຕໍ່ກັບລູກໆຂອງພະອົງດ້ວຍຄວາມຮັກອີກຄັ້ງໜຶ່ງ. ພະອົງໄດ້ເອີ້ນຊາຍໜຸ່ມຄົນໜຶ່ງຊື່ ໂຢເຊັບສະມິດໃຫ້ເປັນສາດສະດາ. ຜ່ານ ໂຢເຊັບ ສະມິດ ຄວາມສົມບູນແຫ່ງພະກິດຕິຄຸນຂອງພະເຢຊູຄຣິດໄດ້ຖືກຟື້ນຟູຂຶ້ນໃນໂລກ.

ໂຢເຊັບ ສະມິດ ອາໄສຢູ່ສະຫະລັດອາເມລິກາ, ບາງທີ່ອາດຈະເປັນປະເທດດຽວທີ່ຊຸ່ມຊື່ນກັບອິດສະລະພາບທາງດ້ານສາດສະໜາໃນເວລານັ້ນ. ມັນເປັນເວລາທີ່ມີຄວາມຕື່ນເຕັ້ນທາງດ້ານສາດສະໜາຫລາຍທີ່ສຸດໃນພາກຕາເວັນອອກຂອງສະຫະລັດອາເມລິກາ. ຄົນໃນຄອບຄົວຂອງເພິ່ນມີຄວາມເຊື່ອດ້ານສາດສະໜາຢ່າງເລິກຊຶ້ງ ແລະ ຊອກຫາຄວາມຈິງຢູ່ສະເໝີ. ແຕ່ວ່າຄູນພໍ່ຫລາຍໆຄົນໄດ້ອ້າງວ່າຕົນເອງມີພະກິດຕິຄຸນທີ່ແທ້ຈິງ. ໂຢເຊັບ ປາດຖະໜາ "ຢາກຮູ້ວ່ານິກາຍໃດໃນນິກາຍທັງໝົດນັ້ນຖືກຕ້ອງ." (Joseph Smith—History 1:18). ພະຄຳພີໄບເບິນໄດ້ສອນວ່າ "ມີພະຜູ້ເປັນເຈົ້າອົງດຽວ, ຄວາມເຊື່ອດຽວ, ແລະ ມີບັບຕິສະມາດຽວ" (ເອເຟໂຊ 4:5). ໂຢເຊັບ ໄດ້ໄປຮ່ວມປະຊຸມຂອງສາດສະໜາຈັກຕ່າງໆ, ແຕ່ເພິ່ນຍັງສັບສົນວ່າ ສາດສະໜາຈັກໃດທີ່ເພິ່ນຄວນຈະເຂົ້າຮ່ວມ. ຕໍ່ມາເພິ່ນໄດ້ຂຽນວ່າ:

"ຄວາມຫຍຸ້ງຍາກ ແລະ ການຕໍ່ສູ້ລ້າງຜານກັນໃນນິກາຍຕ່າງໆ ໃຫຍ່ຫລວງຍິ່ງໜັກເກີນກວ່າຜູ້ໜຸ່ມນ້ອຍ . . . ຢ່າງຂ້າພະເຈົ້າຈະຕັດສິນໃຈແນ່ນອນໄດ້ວ່າ ແມ່ນຜູ້ໃດຜິດ ແລະ ແມ່ນຜູ້ໃດຖືກ. . . . ທ່າມກາງການປະທະຄາລົມໃນຄວາມຫຍຸ້ງຍາກ ແລະ ຄວາມຄິດເຫັນທີ່ມີຢູ່ໃນນັ້ນ ຂ້າພະເຈົ້າໄດ້ເວົ້າກັບຕົນເອງເລື້ອຍໆວ່າ ຈະເຮັດແນວໃດດີ? ໃນບັນດານິກາຍທັງໝົດນີ້ຝ່າຍໃດເປັນຝ່າຍຖືກ ຫລື ຝ່າຍໃດເປັນຝ່າຍຜິດ ຫລືວ່າທັງໝົດນີ້ບໍ່ມີໃຜຖືກ ຖ້າວ່າມີຝ່າຍໜຶ່ງຖືກກໍບໍ່ຮູ້ວ່າເປັນຝ່າຍໃດ ແລະ ຂ້າພະເຈົ້າຈະຮູ້ໄດ້ແນວໃດ? (Joseph Smith—History 1:8, 10).

ໃນຂະນະທີ່ ໂຢເຊັບຄົ້ນຫາຄວາມຈິງທ່າມກາງສາດສະໜາຈັກຕ່າງໆ, ເພິ່ນໄດ້ຫັນໜ້າຫາພະຄຳພີໄບເບິນເພື່ອການນຳທາງ. ເພິ່ນໄດ້ອ່ານວ່າ, "ແຕ່ຖ້າມີຄົນໃດໃນພວກເຈົ້າຂາດປັນຍາກໍໃຫ້ຄົນນັ້ນຂໍຈາກພະເຈົ້າຜູ້ທີ່ຈະໂຜດໃຫ້ແກ່ຕົນ; ເພາະພະເຈົ້າໂຜດໃຫ້ແກ່ທຸກຄົນດ້ວຍໃຈກວ້າງຂວາງ ແລະ ດ້ວຍໃຈກະລຸນາ" (ຢາໂກໂບ 1:5). ເພາະພະຄຳພີຂໍ້ນີ້, ໂຢເຊັບ ໄດ້ຕັດສິນໃຈຖາມພະເຈົ້າວ່າເພິ່ນຄວນເຮັດແນວໃດ. ໃນລະດູໃບໄມ້ປົ່ງປີ 1820 ເພິ່ນໄດ້ເຂົ້າໄປໃນປ່າ ແລະ ໄດ້ຄຸເຂົ່າລົງອະທິຖານ. ເພິ່ນໄດ້ບັນລະຍາຍປະສົບການຂອງເພິ່ນວ່າ:



"ຂ້າພະເຈົ້າເຫັນແສງສະຫວ່າງເປັນເລົາລົງມາເໜືອກວ່າຄວາມສະຫວ່າງຂອງດວງພະອາທິດ ຢູ່ເໜືອຫົວຂອງຂ້າພະເຈົ້າ. ແສງນັ້ນຄ່ອຍເລື່ອນລົງມາຈົນເຖິງຕົວຂ້າພະເຈົ້າ. . . . ເມື່ອແສງນັ້ນລົງມາເຖິງຂ້າພະເຈົ້າ, ຂ້າພະເຈົ້າເຫັນສອງພະອົງປະທັບຢືນຢູ່ໃນອາກາດເໜືອຫົວຂ້າພະເຈົ້າ. ຄວາມສະຫວ່າງ ແລະ ລັດສະໝີພາບຂອງທັງສອງພະອົງນັ້ນເກີນກວ່າທີ່ຈະພັນລະນາໄດ້. ອົງໜຶ່ງໄດ້ຮັບສັ່ງກັບຂ້າພະເຈົ້າໂດຍເອີ້ນຊື່ຂ້າພະເຈົ້າ ແລະ ຊີ້ພະຫັດໄປຫາອີກອົງໜຶ່ງ ແລະ ກ່າວວ່າ—*ນີ້ຄືບຸດທີ່ຮັກຂອງເຮົາ. ຈົ່ງຟັງທ່ານ!*" (Joseph Smith—History 1:16–17).

ໃນພາບທີ່ມາໃຫ້ເຫັນນີ້ ພະເຈົ້າອົງພະບິດາ ແລະ ພະບຸດຂອງພະອົງ, ພະເຢຊູຄຣິດ, ໄດ້ປາກົດກາຍຕໍ່ ໂຢເຊັບ ສະມິດ. ພະຜູ້ຊ່ອຍໃຫ້ລອດບອກ ໂຢເຊັບ ບໍ່ໃຫ້ເຂົ້າຮ່ວມ

ໝາຍເຫດ

ສາດສະໜາຈັກແຫ່ງໃດໆ, ເພາະສາດສະໜາຈັກ "ທັງໝົດນັ້ນຜິດ" ແລະ "ໃນລັດທິທັງໝົດຂອງນິກາຍຕ່າງໆນັ້ນເປັນທີ່ໜ້າກຽດຊັງ." ພະອົງໄດ້ກ່າວວ່າ, "ພວກເຂົາຢູ່ໃກ້ເຮົາແຕ່ປາກ ແຕ່ຈິດໃຈຂອງພວກເຂົາຫ່າງໄກຈາກເຮົາ, ພວກເຂົາສອນບັນຍັດຂອງມະນຸດ ເຊິ່ງມີລັກສະນະເປັນຂອງພະເຈົ້າເປັນຄຳສອນ, ແຕ່ພວກເຂົາປະຕິເສດອຳນາດຂອງພະເຈົ້າ" (Joseph Smith—History 1:19). ເຖິງແມ່ນວ່າຄົນດີຫລາຍໆຄົນມີຄວາມເຊື່ອໃນພະຄິດ ແລະ ພະຍາຍາມຈະເຂົ້າໃຈ ແລະ ສອນພະກິດຕິຄຸນຂອງພະອົງ, ແຕ່ເຂົາບໍ່ມີຄວາມຈິງທີ່ສົມບູນ ຫລື ມີອຳນາດຖານະປະໂລຫິດ ເພື່ອໃຫ້ການຮັບບັບຕິດສະມາ ແລະ ປະກອບພິທີການແຫ່ງຄວາມລອດອື່ນໆ. ເຂົາໄດ້ສືບທອດສະພາບການປະຖິ້ມຄວາມເຊື່ອ ຕາມທີ່ຄົນແຕ່ລະລຸ້ນໄດ້ສືບທອດຈາກຄົນລຸ້ນກ່ອນ, ຮ່ວມດ້ວຍການປ່ຽນແປງໃນຄຳສອນ ແລະ ໃນພິທີການ ເຊັ່ນການຮັບບັບຕິດສະມາ. ເໝືອນດັ່ງທີ່ພະເຈົ້າເຄີຍເຮັດກັບ ອາດາມ, ໂນອາ, ອັບລາຮາມ, ໂມເຊ, ແລະ ສາດສະດາຄົນອື່ນໆ, ພະອົງໄດ້ເອີ້ນ ໂຢເຊັບ ສະມິດ ໃຫ້ເປັນສາດສະດາ ເຊິ່ງຜ່ານເພິ່ນ ພະກິດຕິຄຸນໄດ້ຖືກຟື້ນຟູຂຶ້ນໃນໂລກ.

ຫລັງຈາກການປາກົດກາຍຂອງພະບິດາ ແລະ ພະບຸດ, ທູດສະຫວັນອື່ນໆ, ຫລື ເທວະດາ, ໄດ້ຖືກສົ່ງມາຫາໂຢເຊັບ ສະມິດ ແລະ ຜູ້ຊ່ອຍຂອງເພິ່ນຊື່ ອໍລີເວີ ຄາວເດີລີ. ໂຢຮັນ ບັບຕິດ ໄດ້ປາກົດຕົວ ແລະ ມອບຖານະປະໂລຫິດແຫ່ງອາໂລນໃຫ້ ໂຢເຊັບ ສະມິດ ແລະ ອໍລີເວີ ຄາວເດີລີ, ເຊິ່ງຮ່ວມດ້ວຍສິດອຳນາດໃຫ້ປະກອບພິທີການແຫ່ງການຮັບບັບຕິດສະມາ. ເປໂຕ, ຢາໂກໂບ, ແລະ ໂຢຮັນ (ອັກຄະສາວົກດັ່ງເດີມຂອງພະຄິດ) ໄດ້ປາກົດຕົວ ແລະ ມອບອຳນາດຖານະປະໂລຫິດແຫ່ງເມນຄີເສເດັກໃຫ້ແກ່ ໂຢເຊັບ ສະມິດ ແລະ ອໍລີເວີ ຄາວເດີລີ, ເພື່ອຟື້ນຟູສິດອຳນາດອັນດຽວກັນທີ່ໄດ້ເຄີຍມອບໃຫ້ກັບອັກຄະສາວົກຂອງພະຄິດໃນສະໄໝໂບຮານ. ດ້ວຍອຳນາດຖານະປະໂລຫິດນີ້, ໂຢເຊັບ ສະມິດ ໄດ້ຖືກແນະນຳໃຫ້ຈັດຕັ້ງສາດສະໜາຈັກຂອງພະເຢຊູຄິດໃນໂລກອີກ. ຜ່ານໂຢເຊັບ ສະມິດ, ພະເຢຊູຄິດ ໄດ້ເອີ້ນສິບສອງຄົນ ໃຫ້ເປັນອັກຄະສາວົກ.

ສາດສະດາທັງຫລາຍໃນພະຄຳພີໄບເບິນໄດ້ອ້າງເຖິງລະຍະເວລາທີ່ເຮົາມີຊີວິດຢູ່ນີ້ວ່າ ເປັນວັນສຸດທ້າຍ, ຍຸກສຸກທ້າຍ, ຫລື ສະໄໝແຫ່ງຄວາມສົມບູນຂອງເວລາ. ມັນເປັນຊ່ວງລະຍະເວລາຂອງການສະເດັດມາຄັ້ງທີສອງຂອງພະເຢຊູຄິດ. ເປັນສະໄໝສຸດທ້າຍ. ດ້ວຍເຫດນີ້ ສາດສະໜາຈັກຈຶ່ງໄດ້ມີຊື່ວ່າ ສາດສະໜາຈັກຂອງພະເຢຊູຄິດແຫ່ງສິດທິຊົນຍຸກສຸດທ້າຍ.

ສາດສະດາທີ່ມີຊີວິດຢູ່ນຳພາສາດສະໜາຈັກໃນທຸກວັນນີ້. ສາດສະດາທ່ານນີ້, ປະທານຂອງສາດສະໜາຈັກຂອງພະເຢຊູຄິດແຫ່ງສິດທິຊົນຍຸກສຸດທ້າຍ, ເປັນຜູ້ມີຕຳແໜ່ງອຳນາດຕໍ່ຈາກ ໂຢເຊັບ ສະມິດ. ເພິ່ນ ແລະ ອັກຄະສາວົກໃນປະຈຸບັນ ສືບເຊື້ອສາຍອຳນາດຈາກພະເຢຊູຄິດໃນສາຍແຫ່ງພິທີແຕ່ງຕັ້ງທີ່ບໍ່ຂາດ ຜ່ານ ໂຢເຊັບ ສະມິດ.

## ທ່ອງຈຳ Joseph Smith—History 1:16–17

ໃຫ້ທ່ອງຈຳຄຳບັນຍາຍຂອງ ໂຢເຊັບ ສະມິດ ເຖິງການພົບເຫັນພະບິດາ ແລະ ພະບຸດ (Joseph Smith—History 1:16–17), ແລະ ຕ້ອງຕຽມພ້ອມສະເໝີທີ່ຈະບັນຍາຍເຖິງ ພາບທີ່ມາໃຫ້ເຫັນຄັ້ງທຳອິດ ຕາມຄຳເວົ້າຂອງ ໂຢເຊັບ ສະມິດ ເອງ. ຢ່າຮີບຮ້ອນເພື່ອເຮັດໃຫ້ແລ້ວໄວ. ໃຫ້ສະແດງປະຈັກພະຍານຢ່າງຈິງໃຈວ່າ ທ່ານຮູ້ມັນເປັນຄວາມຈິງແນວໃດ. ຢ່າລັ່ງເລໃຈທີ່ຈະອະທິບາຍວ່າ ເຮັດແນວໃດທ່ານຈຶ່ງຮູ້ຄວາມຈິງນັ້ນ. ເຊື້ອເຊີນຄູ່ຜູ້ສອນສາດສະໜາຂອງທ່ານໃຫ້ເຮັດແບບດຽວກັນ.

## ສະແດງປະຈັກພະຍານ

ໜ້າທີ່ສ່ວນສຳຄັນຂອງຜູ້ສອນສາດສະໜາແມ່ນການສະແດງປະຈັກພະຍານກ່ຽວກັບສາດສະດາ ແລະ ຜູ້ເປັນປະທານໃນປະຈຸບັນຂອງສາດສະໜາຈັກ.

## ການສຶກສາພະຄຳພີ

2 ນີໄຟ 3
D&C 112:20
ເອເຟໂຊ 1:10
ເອເຟໂຊ 4:5
ຢາໂກໂບ 1:5
*ປຶ້ມຫົວນ້ອຍ, ປະຈັກພະຍານຂອງສາດສະດາ ໂຢເຊັບ ສະມິດ*

ໝາຍເຫດ

## ພະຄຳພີມໍມອນ: ປະຈັກພະຍານອີກຢ່າງໜຶ່ງຂອງພະເຢຊູຄຣິດ



ໂດຍທີ່ຮູ້ວ່າ ຄວາມສັບສົນ, ຄວາມບໍ່ເຊື່ອຖື, ແລະ ການໃຫ້ຂ່າວສານທີ່ບໍ່ຖືກຕ້ອງ ຈະຫລົງເຫລືອຢູ່ຫລັງຈາກຫລາຍຮ້ອຍປີໃນຄວາມມືດມົນ, ພະບິດາເທິງສະຫວັນຜູ້ມີແຕ່ຄວາມຮັກຂອງເຮົາ ຈຶ່ງໄດ້ນຳພະຄຳພີ ທີ່ສັກສິດອັນເກົ່າແກ່ ປຽບທຽບກັນໄດ້ກັບພະຄຳພີໄບເບິນອອກມາ, ເຊິ່ງມີຄວາມສົມບູນຂອງພະກິດຕິຄຸນ ທີ່ເປັນນິດຂອງພະເຢຊູຄຣິດຢູ່ໃນນັ້ນ. ພະຄຳພີທີ່ສັກສິດເຫລັ້ມນີ້ໄດ້ມີຫລັກຖານເຮັດໃຫ້ແນ່ໃຈວ່າ ໂຢເຊັບ ສະມິດ ເປັນສາດສະດາທີ່ແທ້ຈິງຂອງພະເຈົ້າ. ບັນທຶກນີ້ແມ່ນພະຄຳພີມໍມອນ: ປະຈັກພະຍານອີກຢ່າງໜຶ່ງເຖິງພະເຢຊູຄຣິດ.

ທູດສະຫວັນຊື່ວ່າ ໂມໂລໄນ ໄດ້ພາ ໂຢເຊັບ ສະມິດ ໄປເນີນພູບ່ອນທີ່ແຜ່ນທອງຄຳໄດ້ຖືກເຊື່ອງໄວ້ຫລາຍຮ້ອຍປີ. ແຜ່ນທອງຄຳເຫລົ່ານີ້ບັນຈຸການຂຽນຂອງສາດສະດາທັງຫລາຍ ເຊິ່ງເລົ່າເລື່ອງຂອງພະເຈົ້າທີ່ຕິດຕໍ່ກັບຜູ້ອາໄສທີ່ເກົ່າແກ່ໃນທະວີບອາເມລິກາ ທັງເໜືອ ແລະ ໃຕ້. ໂຢເຊັບ ສະມິດ ໄດ້ແປຂໍ້ຄວາມໃນແຜ່ນທອງຄຳເຫລົ່ານີ້ໂດຍອຳນາດຂອງພະເຈົ້າ. ສາດສະດາໃນພະຄຳພີມໍມອນໄດ້ຮູ້ກ່ຽວກັບວຽກງານຂອງພະຜູ້ຊ່ອຍໃຫ້ລອດ ແລະ ໄດ້ສອນພະກິດຕິຄຸນຂອງພະອົງ. ຫລັງຈາກຄວາມເປັນຄືນມາຈາກຕາຍຂອງພະອົງ, ພະຄຣິດໄດ້ປາກົດກາຍຕໍ່ຜູ້ຄົນເຫລົ່ານີ້. ພະອົງໄດ້ສອນພະກິດຕິຄຸນຂອງພະອົງໃຫ້ເຂົາ ແລະ ໄດ້ສ້າງຕັ້ງສາດສະໜາຈັກຂອງພະອົງຂຶ້ນ. ພະຄຳພີມໍມອນພິສູດວ່າ "ພະເຈົ້າໄດ້ດົນໃຈຄົນ ແລະ ເອີ້ນພວກເຂົາມາສູ່ວຽກງານອັນສັກສິດຂອງພະອົງໃນຍຸກ ແລະ ຊົ່ວອາຍຸນີ້ ເຊັ່ນດຽວກັນໃນຊົ່ວອາຍຸແຕ່ເກົ່າກ່ອນ" (see D&C 20:11). ເພື່ອຈະໃຫ້ຮູ້ວ່າພະຄຳພີມໍມອນເປັນຈິງ, ບຸກຄົນຕ້ອງອ່ານ, ໄຕ່ຕອງ, ແລະ ອະທິຖານກ່ຽວກັບມັນ. ຜູ້ທີ່ສະແຫວງຫາຄວາມຈິງ ດ້ວຍຄວາມຈິງໃຈໃນທີ່ສຸດຈະຮູ້ວ່າພະຄຳພີມໍມອນເປັນພະຄຳຂອງພະເຈົ້າ.

ການອ່ານ, ການໄຕ່ຕອງ, ແລະ ການອະທິຖານກ່ຽວກັບພະຄຳພີມໍມອນເປັນສິ່ງສຳຄັນສຳລັບຜູ້ປ່ຽນໃຈເຫລື້ອມໃສທີ່ຈະກາຍເປັນສະມາຊິກທີ່ເຂັ້ມແຂງ. ຜູ້ທີ່ເລີ່ມຕົ້ນອ່ານພະຄຳພີມໍມອນເປັນຄັ້ງທຳອິດ ເປັນບາດກ້າວເດີນທີ່ສຳຄັນເພື່ອຈະຮູ້ວ່າ ໂຢເຊັບ ສະມິດ ເປັນສາດສະດາຂອງພະເຈົ້າ ແລະ ວ່າສາດສະໜາຈັກທີ່ແທ້ຈິງໄດ້ຖືກຟື້ນຟູຂຶ້ນຢູ່ໃນໂລກ.

### ໃຊ້ພະຄຳພີມໍມອນເພື່ອຢືນຢັນຄວາມຈິງຂອງການຟື້ນຟູ

ຕໍ່ໄປນີ້ແມ່ນຕົວຢ່າງທີ່ທ່ານອາດຈະເວົ້າເມື່ອແນະນຳພະຄຳພີມໍມອນ:

"ພະເຈົ້າຮັກລູກໆຂອງພະອົງ, ສະນັ້ນ ພະອົງຈຶ່ງໄດ້ໃຫ້ວິທີທີ່ເປັນຕາເຊື່ອ ເພື່ອຢືນຢັນຄວາມຈິງໃນສິ່ງ ທີ່ພວກເຮົາເວົ້າໃຫ້ທ່ານຟັງ. ນີ້ແມ່ນພະຄຳພີມໍມອນ. ຂໍໃຫ້ທ່ານອ່ານສອງວັກສຸດທ້າຍໃນຄຳນຳຂອງປຶ້ມນີ້ໄດ້ບໍ?"

ອະທິບາຍຄວາມໝາຍຂອງແຕ່ລະຫລັກທຳໃນທັງສອງວັກຢ່າງລະມັດລະວັງ ແລະ ເຊື້ອເຊີນຜູ້ສົນໃຈໃຫ້ສັນຍາທີ່ຈະອ່ານສ່ວນໜຶ່ງຂອງພະຄຳພີມໍມອນ ແລະ ປະຕິບັດຕາມຫລັກທຳທີ່ໄດ້ຖືກບັນລະຍາຍໃນທັງສອງວັກນີ້.

ເວລາທ່ານແນະນຳຄົນຜູ້ໜຶ່ງໃຫ້ຮູ້ຈັກກັບພະຄຳພີມໍມອນ, ເປັນການດີທີ່ຈະໃຫ້ເຂົາເບິ່ງພະຄຳພີ, ທົບທວນສະລະບານໜ້ອຍໜຶ່ງ, ແລະ ແບ່ງປັນຂໍ້ພະຄຳພີທີ່ມີຄວາມໝາຍສ່ວນຕົວສຳລັບທ່ານ ຫລື ອາດຈະມີຄວາມໝາຍສຳລັບເຂົາ.

### ການສຶກສາພະຄຳພີ

| | | |
|---|---|---|
| ໜ້າຫົວເລື່ອງຂອງພະຄຳພີມໍມອນ | D&C 1:17–23 | Joseph Smith—History 1:27–64 |
| ຄຳນຳຂອງພະຄຳພີມໍມອນ, ວັກທີ 1–7 | D&C 20:5–12 | |

ໝາຍເຫດ

## ອະທິຖານເພື່ອໃຫ້ຮູ້ຄວາມຈິງຜ່ານພະວິນຍານບໍລິສຸດ

ຂ່າວສານນີ້ກ່ຽວກັບການຟື້ນຟູເປັນໄດ້ຢ່າງດຽວຄື ຈິງ ຫລື ບໍ່ຈິງ. ເຮົາສາມາດຮູ້ຄວາມຈິງໄດ້ໂດຍພະວິນຍານບໍລິສຸດ, ດັ່ງທີ່ໄດ້ສັນຍາໄວ້ໃນ ໂມໂລໄນ 10:3–5. ຫລັງຈາກການອ່ານ ແລະ ການໄຕ່ຕອງຂ່າວສານຂອງພະຄຳພີມໍມອນແລ້ວ, ຜູ້ໃດທີ່ປາດຖະໜາຢາກຮູ້ຄວາມຈິງຕ້ອງຖາມໃນການອະທິຖານເຖິງພະບິດາເທິງສະຫວັນໃນພະນາມຂອງພະເຢຊູຄຣິດ ຖ້າວ່ານີ້ແມ່ນຄວາມຈິງ. ເພື່ອຈະເຮັດແບບນີ້, ເຮົາຕ້ອງກ່າວເຖິງພະບິດາເທິງສະຫວັນຂອງເຮົາ. ເຮົາຂອບພະໄທພະອົງສຳລັບພອນທັງຫລາຍຂອງເຮົາ ແລະ ທູນຂໍພະອົງ ເພື່ອໃຫ້ຮູ້ວ່າຂ່າວສານໃນພະຄຳພີມໍມອນເປັນຄວາມຈິງ. ບໍ່ມີໃຜຈະຮູ້ຄວາມຈິງທາງວິນຍານ ຖ້າປາດສະຈາກການອະທິຖານ.

> **ການອະທິຖານ**
>
> - ກ່າວເຖິງພະບິດາເທິງສະຫວັນຂອງພວກເຮົາ (“ໂອ້ ພະບິດາຜູ້ສະຖິດໃນສະຫວັນຂອງພວກຂ້າພະອົງ, . . .”).
> - ສະແດງຄວາມຮູ້ສຶກຂອງຈິດໃຈຂອງທ່ານ (ຄວາມກະຕັນຍູ, ຄຳຖາມ, ຄຳຂໍຮ້ອງໃຫ້ຢືນຢັນວ່າ ພະຄຳພີມໍມອນເປັນຄວາມຈິງ, ແລະ ຕໍ່ໆໄປ).
> - ປິດ (“ໃນພະນາມຂອງພະເຢຊູຄຣິດເຈົ້າ, ອາແມນ”).

ໃນການຕອບການອະທິຖານຂອງເຮົາ, ພະວິນຍານບໍລິສຸດຈະສອນເຮົາເຖິງຄວາມຈິງ ຜ່ານຄວາມຮູ້ສຶກ ແລະ ຄວາມນຶກຄິດຂອງເຮົາ. ຄວາມຮູ້ສຶກທີ່ມາຈາກພະວິນຍານບໍລິສຸດມີອຳນາດຫລາຍ, ແຕ່ວ່າຄວາມຮູ້ສຶກນັ້ນທຳມະດາແລ້ວ ຈະອ່ອນໂຍນ ແລະ ສະຫງົບ. ເມື່ອເຮົາເລີ່ມຮູ້ສຶກວ່າສິ່ງທີ່ເຮົາຮຽນ ເປັນຄວາມຈິງ, ເຮົາຈະປາດຖະໜາຢາກຮູ້ທຸກຢ່າງທີ່ເຮົາສາມາດຮູ້ໄດ້ກ່ຽວກັບການຟື້ນຟູ.

ໃນຖານະທີ່ຮູ້ວ່າພະຄຳພີມໍມອນເປັນຄວາມຈິງ ຈະນຳເຮົາໄປສູ່ຄວາມຮູ້ວ່າ ໂຢເຊັບ ສະມິດ ໄດ້ຖືກເອີ້ນໃຫ້ເປັນສາດສະດາ ແລະ ວ່າພະກິດຕິຄຸນຂອງພະເຢຊູຄຣິດໄດ້ຖືກຟື້ນຟູຄືນມາໃໝ່ຜ່ານ ໂຢເຊັບ ສະມິດ.

### ການອະທິຖານ

ເຖິງແມ່ນວ່າການອະທິຖານຈະມີບົດບາດໃນຫລາຍໆສາດສະໜາ ແລະ ໃນຫລາຍໆວັດທະນະທຳ, ມັນເປັນການຍາກທີ່ການອະທິຖານຈະຖືເປັນການຕິດຕໍ່ສອງທາງລະຫວ່າງພະເຈົ້າ ແລະ ມະນຸດ. ຊ່ອຍຄົນທີ່ທ່ານສອນ. ໃຫ້ເຂົ້າໃຈວ່າ ເຂົາສາມາດເວົ້າເຖິງຄວາມຮູ້ສຶກຈາກໃຈຂອງເຂົາໃນການອະທິຖານ. ສະແດງໃຫ້ຜູ້ສົນໃຈເຫັນວິທີທີ່ທ່ານອະທິຖານ ຕອນເລີ່ມຕົ້ນບົດຮຽນ ຫລື ຕອນຈົບບົດຮຽນ. ໃຫ້ໃຊ້ຄຳງ່າຍໆທີ່ເຂົາຈະສາມາດໃຊ້ໄດ້ເມື່ອເຂົາອະທິຖານ. ຊ່ອຍເຂົາໃຫ້ເຂົ້າໃຈວ່າພະບິດາເທິງສະຫວັນຈະຕອບຄຳອະທິຖານຂອງເຂົາ, ຕາມທຳມະດາແລ້ວຜ່ານຄວາມຮູ້ສຶກຈາກຈິດໃຈເຂົາ ແລະ ຈາກຄວາມຄິດຂອງເຂົາ. ຖ້າວ່າເຂົາຈິງໃຈ ແລະ ຢາກຮູ້ແທ້ໆວ່າ ພະເຈົ້າມີຈິງ, ພະອົງຈະໃຫ້ຄຳຕອບເຂົາ. ເຊື້ອເຊີນຫົວໜ້າຄອບຄົວໃຫ້ຄູເຂົ່າອະທິຖານຕອນຈົບບົດຮຽນ.

### ການສຶກສາພະຄຳພີ

| | | |
|---|---|---|
| ແອລະມາ 5:45–46 | ໂຢຮັນ 14:26 | ຄູ່ມືຄຳສຳລັບພະຄຳພີມໍມອນ, ວັກທີ 8–9 |
| D&C 8:2–3 | | |

## ການເຊື້ອເຊີນໃຫ້ຮັບບັບຕິດສະມາ

ລະຫວ່າງບົດຮຽນນີ້ ຫລື ບົດຮຽນອື່ນ, ບໍ່ຕ້ອງລັ່ງເລໃຈທີ່ຈະເຊື້ອເຊີນຄົນໃຫ້ຮັບບັບຕິດສະມາ ແລະ ຮັບການຢືນຢັນ.

ໃນການຕຽມພ້ອມຄົນສຳລັບການເຊື້ອເຊີນໃຫ້ຮັບບັບຕິດສະມາ ແລະ ຮັບການຢືນຢັນ, ໃຫ້ສອນຄຳສອນແຫ່ງການບັບຕິດສະມາ ແລະ ໃຫ້ສະແດງປະຈັກພະຍານເລື້ອຍໆ ເຖິງຄວາມສຳຄັນສຳລັບຄົນທັງຫລາຍທີ່ຈະຮັບບັບຕິດສະມາໂດຍອຳນາດ, ກ່ຽວກັບການຮັບປົດບາບ, ແລະ ກ່ຽວກັບຂອງປະທານແຫ່ງພະວິນຍານບໍລິສຸດທີ່ພິເສດ. ທ່ານອາດຈະເວົ້າວ່າ, "ເມື່ອພະຜູ້ເປັນເຈົ້າຕອບຄຳອະທິຖານຂອງທ່ານ ແລະ ທ່ານຮູ້ສຶກວ່າ ຂ່າວສານນີ້ເປັນຄວາມຈິງ, ທ່ານຈະເຮັດຕາມຕົວຢ່າງຂອງພະເຢຊູຄິດໂດຍຮັບບັບຕິດສະມາບໍ?"

ການເຊື້ອເຊີນໃຫ້ຮັບບັບຕິດສະມາ ແລະ ຮັບການຢືນຢັນ ຄວນຈະແຈ່ມແຈ້ງ ແລະ ໂດຍກົງ: "ທ່ານຈະເຮັດຕາມຕົວຢ່າງຂອງພະເຢຊູຄິດ ໂດຍການຮັບບັບຕິດສະມາຈາກຄົນຜູ້ໜຶ່ງທີ່ມີອຳນາດຖານະປະໂລຫິດຂອງພະເຈົ້າບໍ? ເຮົາຈະມີພິທີບັບຕິດສະມາໃນ (ວັນທີ). ທ່ານຈະຕຽມຕົວເພື່ອຮັບບັບຕິດສະມາໃນວັນນັ້ນບໍ?"

ໝາຍເຫດ

ໝາຍເຫດ

# ແນວຄິດສຳລັບການສອນ

ພາກນີ້ຈະໃຫ້ແນວຄິດແກ່ທ່ານເພື່ອໃຊ້ໃນການຕຽມ ແລະ ສອນບົດຮຽນນີ້. ຈົ່ງອະທິຖານ ແລະ ເຮັດຕາມພະວິນຍານເມື່ອທ່ານຕັດສິນໃຈນຳໃຊ້ແນວຄິດເຫລົ່ານີ້. ໃຫ້ເພີ່ມແນວຄິດທີ່ທ່ານເລືອກໃສ່ໃນແຜນບົດຮຽນຂອງທ່ານ. ຈົ່ງເຂົ້າໃຈວ່າ ແນວຄິດເຫລົ່ານີ້ເປັນພຽງແຕ່ຂໍ້ແນະນຳເທົ່ານັ້ນ ເພື່ອຊ່ອຍທ່ານໃຫ້ສະໜອງຄວາມຕ້ອງການຂອງຄົນທີ່ທ່ານສອນ, ແຕ່ບໍ່ແມ່ນເງື່ອນໄຂທີ່ຈຳເປັນ.

## ແຜນບົດຮຽນສັ້ນ (3–5 ນາທີ)

ຫລັງຈາກຫລາຍສັດຕະວັດຂອງການສູນຫາຍໄປ, ພະກິດຕິຄຸນຂອງພະເຢຊູຄິດໄດ້ຖືກຟື້ນຟູຄືນມາໃໝ່ສູ່ໂລກ ໂດຍພະບິດາເທິງສະຫວັນທີ່ຮັກຂອງພວກເຮົາຜ່ານສາດສະດາຜູ້ມີຊີວິດຢູ່. ພະຄຳພີມໍມອນເປັນຫລັກຖານຕໍ່ເລື່ອງນີ້. ທ່ານສາມາດຖືມັນໃນມືຂອງທ່ານ. ທ່ານສາມາດອ່ານມັນໄດ້, ໄຕ່ຕອງຂ່າວສານໃນປຶ້ມນີ້ວ່າມັນສາມາດປັບປຸງຊີວິດຂອງທ່ານໄດ້ແນວໃດ, ແລະ ອະທິຖານເພື່ອໃຫ້ຮູ້ວ່າຂ່າວສານນັ້ນເປັນພະຄຳຂອງພະເຈົ້າ.

- ພະເຈົ້າເປັນພະບິດາເທິງສະຫວັນທີ່ຮັກຂອງເຮົາ
- ພະກິດຕິຄຸນໃຫ້ພອນແກ່ຄອບຄົວ
- ພະບິດາເທິງສະຫວັນເປີດເຜີຍພະກິດຕິຄຸນຂອງພະອົງໃນທຸກຍຸກທຸກສະໄໝ
- ພາລະກິດຂອງພະຜູ້ຊ່ອຍໃຫ້ລອດໃນໂລກ ແລະ ການຊົດໃຊ້
- ການປະຖິ້ມຄວາມເຊື່ອທີ່ຍິ່ງໃຫຍ່
- ການຟື້ນຟູພະກິດຕິຄຸນຂອງພະເຢຊູຄິດຜ່ານ ໂຈເຊັບ ສະມິດ
- ພະຄຳພີມໍມອນ: ປະຈັກພະຍານອີກຢ່າງໜຶ່ງເຖິງພະເຢຊູຄິດ
- ອະທິຖານເພື່ອໃຫ້ຮູ້ຄວາມຈິງຜ່ານພະວິນຍານບໍລິສຸດ

### ຄຳໝັ້ນສັນຍາ:

- ທ່ານຈະອ່ານ ແລະ ອະທິຖານເພື່ອໃຫ້ຮູ້ວ່າພະຄຳພີມໍມອນເປັນພະຄຳຂອງພະເຈົ້າບໍ?
- ທ່ານຈະອະທິຖານເພື່ອໃຫ້ຮູ້ວ່າ ໂຈເຊັບ ສະມິດ ເປັນສາດສະດາບໍ?
- ທ່ານຈະໄປໂບດນຳພວກເຮົາບໍ່ວັນອາທິດນີ້?
- ພວກເຮົາຂໍນັດເວລາມາຢ້ຽມຢາມເທື່ອໜ້າໄດ້ບໍ?
- ພະບັນຍັດຈາກບົດຮຽນທີ 4 ທີ່ທ່ານເລືອກເອົາມາຮ່ວມ.

ໝາຍເຫດ

## ແຜນບົດຮຽນຍາວປານກາງ (10–15 ນາທີ)

ຂ່າວສານຂອງເຮົາເປັນສິ່ງທີ່ມະຫັດສະຈັນ ແລະ ເຂົ້າໃຈໄດ້ງ່າຍ. ພະເຈົ້າແມ່ນພະບິດາຂອງເຮົາ. ເຮົາເປັນລູກໆຂອງພະອົງ. ເຮົາເປັນສ່ວນໜຶ່ງໃນຄອບຄົວຂອງພະອົງ. ພະອົງຮັກເຮົາ. ຈາກການເລີ່ມຕົ້ນຂອງໂລກ. ພະອົງໄດ້ຕິດຕາມແບບແຜນຂອງຄວາມຮັກ ແລະ ຄວາມເປັນຫ່ວງເປັນໄຍ. ພະອົງໄດ້ຕິດຕໍ່ມະນຸດດ້ວຍຄວາມຮັກຫລາຍໆຄັ້ງເພື່ອເປີດເຜີຍພະກິດຕິຄຸນຂອງພະເຢຊູຄິດ ເພື່ອວ່າລູກໆຂອງພະອົງຈະສາມາດຮູ້ວິທີທີ່ຈະກັບໄປຫາພະອົງ.ພະອົງໄດ້ເປີດເຜີຍຕໍ່ສາດສະດາທັງຫລາຍດັ່ງເຊັ່ນ ອາດາມ, ໂນອາ, ອັບລາຮາມ, ແລະ ໂມເຊ. ແຕ່ວ່າຜູ້ຄົນເລືອກທີ່ຈະປະຕິເສດພະກິດຕິຄຸນນັ້ນຊ້ຳແລ້ວຊ້ຳອີກ. ສອງພັນປີຜ່ານມາ, ພະເຢຊູຄິດໄດ້ສອນພະກິດຕິຄຸນ ແລະ ສ້າງຕັ້ງສາດສະໜາຈັກຂອງພະອົງຂຶ້ນດ້ວຍຕົວພະອົງເອງ, ແລະ ບັນລຸການຊົດໃຊ້. ຢ່າງບໍ່ເປັນຕາເຊື່ອ, ຜູ້ຄົນໄດ້ປະຕິເສດພະເຢຊູ. ເວລາໃດກໍຕາມທີ່ຜູ້ຄົນບໍ່ສົນໃຈຫລືປ່ຽນແປງຄຳສອນ ແລະ ພິທີການທີ່ແທ້ຈິງ, ພະເຈົ້າໄດ້ຖອນສິດອຳນາດຂອງພະອົງອອກຈາກການບໍລິຫານສາດສະໜາຈັກ.

ການເຊື້ອເຊີນຂອງພວກເຮົາຕໍ່ທ່ານ ແລະ ຜູ້ຄົນທັງໝົດ ແມ່ນເພື່ອປະສົມກັບຄວາມຈິງທີ່ທ່ານຖືວ່າເປັນຂອງມີຄ່າແລ້ວ. ໃຫ້ພິຈາລະນາຫລັກຖານຂອງພວກເຮົາວ່າພະບິດາເທິງສະຫວັນ ແລະ ພະບຸດຂອງພະອົງ, ພະເຢຊູຄິດ, ໄດ້ຕິດຕໍ່ລູກໆຂອງພະອົງດ້ວຍຄວາມຮັກອີກຄັ້ງໜຶ່ງ ແລະ ໄດ້ເປີດເຜີຍຄວາມສົມບູນຂອງພະກິດຕິຄຸນຕໍ່ສາດສະດາຄົນໜຶ່ງ. ສາດສະດາທ່ານນີ້ຊື່ວ່າ ໂຢເຊັບ ສະມິດ. ຫລັກຖານຂອງຄວາມຈິງ ທີ່ດີເລີດນີ້ໄດ້ຄົ້ນພົບຢູ່ໃນປຶ້ມ—ເຊິ່ງແມ່ນພະຄຳພີມໍມອນ—ເຊິ່ງທ່ານອາດຈະສາມາດອ່ານ, ໄຕ່ຕອງ ແລະ ອະທິຖານໄດ້. ຖ້າວ່າທ່ານອະທິຖານດ້ວຍໃຈຈິງ, ດ້ວຍເຈດຕະນາອັນແທ້ຈິງ ແລະ ໂດຍມີສັດທາໃນພະຄິດ, ພະເຈົ້າຈະບອກທ່ານວ່າມັນແມ່ນຄວາມຈິງໂດຍອຳນາດຂອງພະວິນຍານບໍລິສຸດ.

### ຄຳໝັ້ນສັນຍາ:

- ທ່ານຈະອ່ານ ແລະ ອະທິຖານເພື່ອໃຫ້ຮູ້ວ່າພະຄຳພີມໍມອນເປັນພະຄຳຂອງພະເຈົ້າບໍ?
- ທ່ານຈະອະທິຖານເພື່ອໃຫ້ຮູ້ວ່າ ໂຢເຊັບ ສະມິດ ເປັນສາດສະດາບໍ?
- ທ່ານຈະໄປໂບດນຳພວກເຮົາບໍ່ວັນອາທິດນີ້?
- ພວກເຮົາຂໍນັດເວລາມາຢ້ຽມຢາມເທື່ອໜ້າໄດ້ບໍ?
- ພະບັນຍັດຈາກບົດຮຽນທີ 4 ທີ່ທ່ານເລືອກເອົາມາຮ່ວມ.

ບົດຮຽນທີ 1:
ການຟື້ນຟູ

ໝາຍເຫດ

### ແຜນບົດຮຽນທັງໝົດ (30–45 ນາທີ)

- ພະເຈົ້າເປັນພະບິດາເທິງສະຫວັນທີ່ຮັກຂອງເຮົາ
  - ເຮົາທັງຫລາຍເປັນລູກຂອງພະເຈົ້າ (ເບິ່ງ ກິດຈະການ 17:29).
  - ພະເຈົ້າຮັກເຮົາ ແລະ ຈະຊ່ອຍເຮົາເຮັດການເລືອກທີ່ຖືກຕ້ອງ.
  - ຜ່ານພະເຢຊູຄິດ, ເຮົາສາມາດຢູ່ກັບພະເຈົ້າອີກ (ເບິ່ງ ໂຢຮັນ 3:16–17).
- ພະກິດຕິຄຸນໃຫ້ພອນແກ່ຄອບຄົວ
  - ພະກິດຕິຄຸນຂອງພະເຢຊູຄິດຊ່ອຍພັດທະນາຄວາມສຳພັນໃນຄອບຄົວໃຫ້ເຂັ້ມແຂງຂຶ້ນ.
  - ຄອບຄົວໄດ້ຖືກແຕ່ງຕັ້ງຈາກພະເຈົ້າ; ຄອບຄົວເປັນໜ່ວຍທີ່ສຳຄັນທີ່ສຸດຕໍ່ສັງຄົມໃນເວລານີ້ ແລະ ຊົ່ວນິລັນດອນ. (see D&C 49:15–16)
  - ຄອບຄົວເປັນບ່ອນດີທີ່ສຸດທີ່ຈະສອນ, ຮຽນຮູ້, ແລະ ໃຊ້ຫລັກທຳພະກິດຕິຄຸນ (see D&C 68:25; ປະຖົມມະການ 18:19; ຈົດເຊັນບັນຊີ 6:7).
  - ຄອບຄົວສາມາດເປັນບ່ອນປອດໄພ, ສະຫງົບ, ແລະ ມ່ວນຊື່ນ.
- ພະບິດາເທິງສະຫວັນເປີດເຜີຍພະກິດຕິຄຸນຂອງພະອົງໃນທຸກຍຸກທຸກສະໄໝ
  - ພະເຈົ້າເອີ້ນສາດສະດາທັງຫລາຍໃຫ້ສອນພະກິດຕິຄຸນ (ເບິ່ງ ອາໂມດ 3:7).
  - ການປະຖິ້ມຄວາມເຊື່ອໝາຍຄວາມວ່າປະຕິເສດສາດສະດາ ແລະ ພະກິດຕິຄຸນ.
  - ສະໄໝແມ່ນລະຍະເວລາທີ່ສາດສະດາໄດ້ສອນພະກິດຕິຄຸນ. ສະໄໝແຕ່ກ່ອນໄດ້ຈົບລົງໃນການປະຖິ້ມຄວາມເຊື່ອ (see D&C 136:36–38).
  - ອາດາມ, ໂນອາ, ອັບລາຮາມ, ໂມເຊ, ແລະ ສາດສະດາໂບຮານຄົນອື່ນໆທັງໝົດໄດ້ສອນພະກິດຕິຄຸນ (see Moses 5:4–12).
- ພາລະກິດໃນໂລກຂອງພະຜູ້ຊ່ອຍໃຫ້ລອດ ແລະ ການຊົດໃຊ້
  - ພະບຸດຂອງພະເຈົ້າໄດ້ຟື້ນຟູ ແລະ ໄດ້ສອນພະກິດຕິຄຸນ. ພະອົງໄດ້ກະທຳການອັດສະຈັນຫລາຍໆຢ່າງ (see Bible Dictionary, “Miracles,” 732–33).
  - ພະອົງເອີ້ນບາງຄົນໃຫ້ມາເປັນອັກຄະສາວົກ ແລະ ໄດ້ມອບອຳນາດຖານະປະໂລຫິດໃຫ້ແກ່ເຂົາເຈົ້າ ເພື່ອສອນພະກິດຕິຄຸນ ແລະ ປະກອບພິທີການແຫ່ງຄວາມລອດທັງຫລາຍ ດັ່ງເຊັ່ນບັບຕິດສະມາ (ເບິ່ງ ໂຢຮັນ 15:16).
  - ພະຄິດໄດ້ສ້າງຕັ້ງສາດສະໜາຈັກຂອງພະອົງຂຶ້ນ.

ໝາຍເຫດ

- ພະຄິດໄດ້ຖືກຄຶງ, ແລະ ອັກຄະສາວົກຂອງພະອົງໄດ້ຖືກປະຕິເສດ ແລະ ຖືກຂ້າ (ເບິ່ງ ມັດທາຍ 27:35; ມາລະໂກ 15:25).
- ພະຄິດໄດ້ປະສົບຄວາມສຳເລັດໃນການຊົດໃຊ້ (see Bible Dictionary, "Atonement," 617).

• ການປະຖິ້ມຄວາມເຊື່ອທີ່ຍິ່ງໃຫຍ່

- ປາດສະຈາກການເປີດເຜີຍຜ່ານສາດສະດາ, ຜູ້ຄົນໄດ້ຕົກຢູ່ໃນຄວາມມືດມົວທາງວິນຍານ (ເບິ່ງ ອາໂມດ 8:11–12).
- ສາດສະດາ ແລະ ອັກຄະສາວົກໄດ້ທຳນາຍການປະຖິ້ມຄວາມເຊື່ອທີ່ຍິ່ງໃຫຍ່ (ເບິ່ງ 2 ເທຊະໂລນິກ 2:1–3).

• ການຟື້ນຟູພະກິດຕິຄຸນຂອງພະເຢຊູຄິດຜ່ານ ໂຢເຊັບ ສະມິດ

- ໂຢເຊັບຄົ້ນຫາຄວາມຈິງ (see Joseph Smith—History 1:8, 10).
- ພະເຈົ້າ ແລະ ພະເຢຊູຄິດ ໄດ້ປາກົດກາຍຕໍ່ ໂຢເຊັບ ສະມິດ (see Joseph Smith— History 1:16–17)
- ຄືກັນກັບສາດສະດາໃນສະໄໝກ່ອນ, ໂຢເຊັບ ສະມິດ ໄດ້ຖືກເອີ້ນໃຫ້ເປັນສາດສະດາຂອງສະໄໝສຸດທ້າຍນີ້.
- ພະເຈົ້າໄດ້ຟື້ນຟູພະກິດຕິຄຸນຢ່າງສົມບູນຜ່ານ ໂຢເຊັບ ສະມິດ (see D&C 35:17; 135:3).
- ທູດສະຫວັນອົງອື່ນໆໄດ້ຟື້ນຟູຖານະປະໂລຫິດ, ແລະ ສາດສະໜາຈັກຂອງພະຄິດໄດ້ຖືກສ້າງຕັ້ງຂຶ້ນ (see D&C 13; 27:12).
- ສາດສະດາຜູ້ມີຊີວິດຢູ່ນຳພາສາດສະໜາຈັກໃນທຸກວັນນີ້.

• ພະຄຳພີມໍມອນ: ປະຈັກພະຍານອີກຢ່າງໜຶ່ງເຖິງພະເຢຊູຄິດ

- ພະຄຳພີມໍມອນເປັນຫລັກຖານທີ່ເປັນຕາເຊື່ອວ່າ ໂຢເຊັບ ສະມິດ ເປັນສາດສະດາ.
- ໂຢເຊັບໄດ້ແປແຜ່ນທອງຄຳໂດຍອຳນາດຂອງພະເຈົ້າ (ເບິ່ງ ຄຳນຳສຳລັບພະຄຳພີມໍມອນ, ວັກທີ 5).
- ພະຄຳພີມໍມອນພິສູດວ່າ ພະເຈົ້າດົນໃຈສາດສະດາໃນປະຈຸບັນຂອງເຮົາເໝືອນດັ່ງພະອົງໄດ້ກະທຳໃນທຸກຍຸກທຸກສະໄໝ (see D&C 20:5–12).
- ພະຄຳພີມໍມອນປະກອບດ້ວຍພະກິດຕິຄຸນຂອງພະເຢຊູຄິດຢ່າງສົມບູນ (see D&C 20:89).

ບົດຮຽນທີ 1:
ການຟື້ນຟູ

ໝາຍເຫດ

- ອະທິຖານເພື່ອໃຫ້ຮູ້ຄວາມຈິງຜ່ານພະວິນຍານບໍລິສຸດ
  - ທ່ານສາມາດຮູ້ວ່າພະຄຳພີມໍມອນເປັນຄວາມຈິງ (ເບິ່ງ ໂມໂຣໄນ 10:3–5; ຄຳນຳສຳລັບພະຄຳພີມໍມອນ, ວັກທີ 1, 8–9).
  - ພະວິນຍານບໍລິສຸດຈະສອນທ່ານໂດຍຜ່ານຄວາມຄິດ ແລະ ຄວາມຮູ້ສຶກຂອງທ່ານ (see D&C 8:2–3).

ຄຳໝັ້ນສັນຍາ:

- ທ່ານຈະອ່ານ ແລະ ອະທິຖານເພື່ອໃຫ້ຮູ້ວ່າພະຄຳພີມໍມອນເປັນພະຄຳຂອງພະເຈົ້າບໍ?
- ທ່ານຈະອະທິຖານເພື່ອໃຫ້ຮູ້ວ່າ ໂຈເຊັບ ສະມິດ ເປັນສາດສະດາບໍ?
- ທ່ານຈະໄປໂບດນຳພວກເຮົາບໍ່ວັນອາທິດນີ້?
- ພວກເຮົາຂໍນັດເວລາມາຢ້ຽມຢາມເທື່ອໜ້າໄດ້ບໍ?
- ພະບັນຍັດຈາກບົດຮຽນທີ 4 ທີ່ທ່ານເລືອກເອົາມາຮ່ວມ.

## ຄຳຖາມທີ່ຕ້ອງຖາມຫລັງຈາກສອນແລ້ວ

- ທ່ານມີຄຳຖາມຫຍັງບໍ່ກ່ຽວກັບສິ່ງທີ່ພວກເຮົາສອນມາ?
- ຖ້າວ່າມີສາດສະດາຢູ່ໃນໂລກປະຈຸບັນນີ້, ທ່ານຈະຖາມເພິ່ນຫຍັງແດ່?
- ທ່ານຮູ້ສຶກບໍ່ວ່າພະເຈົ້າໄດ້ຍິນການອະທິຖານຂອງທ່ານ? ເປັນຫຍັງ?
- ທ່ານຢາກຮູ້ບໍ່ວ່າພະຄຳພີມໍມອນເປັນຄວາມຈິງ? ເປັນຫຍັງ?

## ການອະທິບາຍຄຳສັບທີ່ສຳຄັນ

- **ສິດທິ:** ຄວາມສາມາດ ແລະ ສິດພິເສດທີ່ພະເຈົ້າໄດ້ມອບໃຫ້ຄົນເພື່ອຈະເລືອກ ແລະ ກະທຳເພື່ອຕົວຂອງເຂົາເອງ.
- **ການປະຖິ້ມຄວາມເຊື່ອ:** ການຫັນຫລັງຈາກຄວາມຈິງ ທີ່ເຮັດໂດຍບຸກຄົນ, ສາດສະໜາຈັກ, ຫລື ຄົນທັງໝົດໃນປະເທດຊາດ. ນີ້ຮວມດ້ວຍການກະບົດຕໍ່ຕ້ານອຳນາດ ແລະ ການປະຕິເສດສາດສະດາ. ຫລັກຖານກ່ຽວກັບການປະຖິ້ມຄວາມເຊື່ອມີການລ່ວງລະເມີດກົດຂອງພະເຈົ້າ, ການປ່ຽນແປງພິທີການແຫ່ງພະກິດຕິຄຸນ, ແລະ ທຳລາຍພັນທະສັນຍາ (ເບິ່ງ ເອຊາຢາ 24:5).
- **ສະໄໝ:** ລະຍະເວລາທີ່ພະຜູ້ເປັນເຈົ້າມີຜູ້ຮັບໃຊ້ຄົນໜຶ່ງທີ່ມີອຳນາດໃນໂລກ ຜູ້ທີ່ຖືຂໍແຈຂອງຖານະປະໂລຫິດທີ່ສັກສິດ. ນອກຈາກພະເຢຊູຄຣິດແລ້ວ, ສາດສະດາດັ່ງເຊັ່ນ ອາດາມ, ເອໂນກ, ໂນອາ, ອັບລາຮາມ, ໂມເຊ, ແລະ ໂຈເຊັບ ສະມິດ ແຕ່ລະຄົນໄດ້ເລີ່ມຕົ້ນສະໄໝພະກິດຕິຄຸນ. ເມື່ອພະຜູ້ເປັນເຈົ້າສ້າງຕັ້ງສະໄໝ, ພະກິດຕິຄຸນຖືກເປີດເຜີຍອີກຄັ້ງໜຶ່ງ ເພື່ອວ່າຜູ້ຄົນຂອງສະໄໝນັ້ນບໍ່ຈຳເປັນຕ້ອງອາໄສ ສະໄໝທີ່ຜ່ານມາ ເພື່ອຄວາມຮູ້ກ່ຽວກັບແຜນແຫ່ງຄວາມລອດ. ສະໄໝທີ່ຖືກເລີ່ມຕົ້ນໂດຍ ໂຈເຊັບ ສະມິດ ເປັນທີ່ຮູ້ກັນວ່າ "ສະໄໝແຫ່ງຄວາມສົມບູນຂອງເວລາ."

ໝາຍເຫດ

- **ຖານະປະໂລຫິດ:** ອຳນາດ ແລະ ພະລັງ ທີ່ພະເຈົ້າໄດ້ມອບໃຫ້ມະນຸດເພື່ອປະຕິບັດໃນນາມຂອງພະເຢຊູຄຣິດໃນທຸກໆສິ່ງເພື່ອຄວາມລອດຂອງມະນຸດ.

- **ສາດສະດາ:** ຊາຍຜູ້ໜຶ່ງທີ່ໄດ້ຖືກເອີ້ນໂດຍ ແລະ ເວົ້າແທນພະເຈົ້າ. ໃນຖານະເປັນທູດຂອງພະເຈົ້າ, ສາດສະດາຮັບອຳນາດຖານະປະໂລຫິດ, ພະບັນຍັດ, ການທຳນາຍ, ແລະ ການເປີດເຜີຍຈາກພະເຈົ້າ. ໜ້າທີ່ຂອງເພິ່ນແມ່ນຈະເຮັດໃຫ້ມະນຸດທົ່ວໂລກຮູ້ກ່ຽວກັບຄວາມປາດຖະໜາຂອງພະເຈົ້າ ແລະ ລັກສະນະທີ່ແທ້ຈິງຂອງພະອົງ ແລະ ສະແດງຄວາມໝາຍຂອງການຕິດຕໍ່ຂອງພະອົງກັບເຂົາ. ສາດສະດາກ່າວຫາຄວາມບາບ ແລະ ທຳນາຍເຖິງຜົນທີ່ເກີດຂຶ້ນຈາກມັນ. ເພິ່ນເປັນຄົນທີ່ເທດສະໜາ ຄວາມຊອບທຳ. ບາງເທື່ອ, ສາດສະດາ ອາດຈະສາມາດທຳນາຍລ່ວງໜ້າເຖິງອານາຄົດ ເພື່ອປະໂຫຍດຂອງມະນຸດທົ່ວໂລກ. ໜ້າທີ່ສຳຄັນທີ່ສຸດຂອງເພິ່ນຄື ສະແດງປະຈັກພະຍານກ່ຽວກັບພະເຢຊູຄຣິດ.

- **ພະຜູ້ໄຖ່:** ພະເຢຊູຄຣິດເປັນພະຜູ້ໄຖ່ອົງຍິ່ງໃຫຍ່ຂອງມະນຸດ ເພາະວ່າພະອົງໄດ້ຈ່າຍຄ່າບາບຂອງມະນຸດ ແລະ ເຮັດໃຫ້ຄວາມເປັນຄືນມາຈາກຕາຍຂອງທຸກໆຄົນເປັນໄປໄດ້ ຜ່ານການຊົດໃຊ້ຂອງພະອົງ. ການໄຖ່ແມ່ນການຊ່ອຍໃຫ້ລອດພົ້ນຈາກການຈັບແໜ້ນ, ຫລື ການຄ່າໄຖ່, ດັ່ງເຊັ່ນປ່ອຍໃຫ້ຄົນ ຄົນໜຶ່ງເປັນອິດສະລະຈາກການເປັນທາດໂດຍການຊຳລະໜີ້ສິນ. ການໄຖ່ອ້າງອີງເຖິງການຊົດໃຊ້ຂອງພະເຢຊູຄຣິດ ແລະ ປ່ອຍໃຫ້ພົ້ນຈາກບາບ. ການຊົດໃຊ້ຂອງພະເຢຊູໄຖ່ມະນຸດທັງຫລາຍຈາກການຕາຍທາງຮ່າງກາຍ. ຜ່ານການຊົດໃຊ້ຂອງພະອົງ, ເຊິ່ງຮ່ວມດ້ວຍຄວາມທຸກທໍລະມານຂອງພະອົງໃນ ເຄັດເຊມາເນ ແລະ ເທິງໄມ້ກາງແຂນພ້ອມດ້ວຍຄວາມເປັນຄືນມາຈາກຕາຍຂອງພະອົງ, ເຂົາເຫລົ່ານັ້ນທີ່ມີສັດທາໃນພະອົງ ແລະ ກັບໃຈ ໄດ້ຖືກໄຖ່ຈາກຄວາມຕາຍທາງວິນຍານ.

- **ຜູ້ແກ້ໄຂໃຫ້ດີຂຶ້ນ:** ການແກ້ໄຂໃຫ້ດີຂຶ້ນແມ່ນການປ່ຽນແປງບາງສິ່ງບາງຢ່າງເພື່ອຈະປັບປຸງມັນ. ຄຳວ່າ *ຜູ້ແກ້ໄຂໃຫ້ດີຂຶ້ນ* ແມ່ນກ່າວເຖິງຊາຍ ແລະ ຍິງທັງຫລາຍ (ດັ່ງເຊັ່ນ ມາທິນ ລູເທີ, ຈອນ ຄາລະວິນ, ວິວລຽມ ທິນແດວ, ແລະ ຈອນ ໄວຄະລິບ) ຜູ້ທີ່ຄັດຄ້ານການປະຕິບັດຂອງສາດສະໜາຈັກທີ່ມີຢູ່ໃນຕອນນັ້ນ, ເຊິ່ງພວກເຂົາຮູ້ສຶກວ່າສາດສະໜາຈັກເຫລົ່ານັ້ນຕ້ອງມີການແກ້ໄຂໃຫ້ດີຂຶ້ນ.

- **ການຟື້ນຟູ:** ການຟື້ນຟູໝາຍຄວາມວ່າ ກັບຄືນສູ່ສະພາບເດີມ, ຫລື ນຳກັບຄືນມາ. ຄຳວ່າ ການຟື້ນຟູ, ທີ່ໃຊ້ໂດຍສິດທິຊົນຍຸກສຸດທ້າຍ, ໝາຍຄວາມວ່າ ສາດສະໜາຈັກທີ່ແທ້ຈິງຂອງພະເຢຊູຄຣິດ, ເຊິ່ງໄດ້ເສຍໄປໂດຍການປະຖິ້ມຄວາມເຊື່ອ, ໄດ້ຖືກນຳກັບຄືນມາໃໝ່ ຄືກັນກັບຕອນທຳອິດທີ່ສາດສະໜາຈັກໄດ້ຖືກຕັ້ງຂຶ້ນໂດຍພະເຢຊູຄຣິດ. ຕ່າງກັນກັບການແກ້ໄຂໃຫ້ດີຂຶ້ນ, ການຟື້ນຟູໄດ້ຮັບຜົນສຳເລັດດ້ວຍອຳນາດອັນສັກສິດຜ່ານການເປີດເຜີຍ.

- **ການເປີດເຜີຍ:** ການຕິດຕໍ່ຈາກພະເຈົ້າເຖິງລູກໆຂອງພະອົງໃນໂລກ. ການເປີດເຜີຍອາດຈະເກີດຂຶ້ນຜ່ານແສງສະຫວ່າງແຫ່ງພະຄຣິດ ແລະ ພະວິນຍານບໍລິສຸດ ດ້ວຍວິທີຂອງການດົນໃຈ, ພາບທີ່ມາໃຫ້ເຫັນ (ນິມິດ), ຄວາມຝັນ, ຫລື ການຢ້ຽມຢາມຈາກທູດສະຫວັນ. ການເປີດເຜີຍໄດ້ໃຫ້ການນຳພາເຊິ່ງສາມາດນຳຜູ້ຊື່ສັດໄປສູ່ຄວາມລອດຊົ່ວນິລັນດອນໃນອານາຈັກຊັ້ນສູງ. ພະຜູ້ເປັນເຈົ້າໄດ້ເປີດເຜີຍວຽກງານຂອງພະອົງແກ່ສາດສະດາທັງຫລາຍ ແລະ ຢືນຢັນຕໍ່ຜູ້ມີຄວາມເຊື່ອວ່າການເປີດເຜີຍແກ່ສາດສະດາທັງຫລາຍແມ່ນຄວາມຈິງ (ເບິ່ງ ອາໂມດ 3:7). ຜ່ານການເປີດເຜີຍ, ພະຜູ້ເປັນເຈົ້າໃຫ້ການນຳພາສ່ວນຕົວໃຫ້ແຕ່ລະບຸກຄົນຜູ້ທີ່ຊອກຫາຄວາມຈິງ ແລະ ຜູ້ທີ່ມີສັດທາ, ຜູ້ທີ່ກັບໃຈ, ແລະ ຜູ້ທີ່ເຊື່ອຟັງພະກິດຕິຄຸນຂອງພະເຢຊູຄຣິດ.

ໝາຍເຫດ

ຄຳສັບອື່ນໆທີ່ທ່ານອາດຈະຕ້ອງແປຄວາມໝາຍເພີ່ມເຕີມສຳລັບຄົນທີ່ທ່ານສອນ

- ອັກຄະສາວົກ
- ພະຄຳພີໄບເບິ້ນ
- ອົດທົນຈົນເຖິງທີ່ສຸດ
- ຂອງປະທານແຫ່ງພະວິນຍານບໍລິສຸດ
- ພະກິດຕິຄຸນ
- ການເຊື່ອຟັງ ແລະ ການບໍ່ເຊື່ອຟັງພະບັນຍັດ
- ພິທີການແຫ່ງຄວາມລອດ
- ການອະທິຖານ
- ກັບໄປຢູ່ໃນທີ່ປະທັບຂອງພະອົງ
- ພະຜູ້ຊ່ອຍໃຫ້ລອດ
- ພະຄຳພີ
- ບາບ
- ການຮັບຜິດຊອບຕໍ່ພາລະກິດ

## ຜູ້ແກ້ໄຂໃຫ້ດີຂຶ້ນ ແລະ ຜູ້ນຳພາສາດສະໜາທົ່ວໂລກ

**ຕໍ່ໄປນີ້ແມ່ນຂໍ້ມູນກ່ຽວກັບຄົນເຫລົ່ານີ້ ເພື່ອຈະໃຊ້ໃນເວລາທີ່ຕ້ອງການເທົ່ານັ້ນ.**

**ຈອນ ໄວຄະລິບ:** ເກີດໃນສັດຕະວັດທີ 14 ຢູ່ໃນປະເທດອັງກິດ. ເປັນນັກສຶກສາຝ່າຍສາດສະໜາຢູ່ທີ່ມະຫາວິທະຍາໄລ ໂອກສະເຟີດ. ເພິ່ນໄດ້ສອນວ່າ ສາດສະໜາກາໂຕລິກ ບໍ່ມີຂໍກະແຈຂອງຖານະປະໂລຫິດ, ວ່າ ຢູຄະລິດອັນສັກສິດ (ໝາຍຄວາມວ່າ ສິນລະລຶກ) ຕາມຄວາມເປັນຈິງບໍ່ແມ່ນຮ່າງກາຍຂອງພະຄິດ, ແລະ ວ່າສາດສະໜາຈັກບໍ່ຄວນໃຊ້ອຳນາດ ຫລື ອິດທິພົນທາງການເມືອງເໜືອຜູ້ຄົນ. ໄດ້ແປພະຄຳພີໄບເບິ້ນ ເປັນພາສາອັງກິດ. ເສຍຊີວິດ ວັນທີ 31 ເດືອນທັນວາ ປີ 1384.

**ມາທິນ ລູເທີ:** ເກີດ ວັນທີ 10 ເດືອນພະຈິກ ປີ 1483, ຢູ່ປະເທດ ເຢຍລະມັນ. ໄດ້ສຶກສາຢູ່ທີ່ມະຫາວິທະຍາໄລ ເອີເຟີດ ແລະ ວິດເທນເບີກ. ໄດ້ຕອກຂໍ້ສະເໜີ 95 ຂໍ້ໃສ່ປະຕູໂບດຫໍປະສາດ ໃນການຕໍ່ຕ້ານກ່ຽວກັບການສອນຫລາຍໆຢ່າງຂອງສາດສະໜາໂລມັນກາໂຕລິກ, ຮ່ວມດ້ວຍການປະຕິບັດທີ່ໃຫ້ຄົນຈ່າຍເງິນເພື່ອຈະໄດ້ຮັບການໃຫ້ອະໄພຕໍ່ບາບ. ເສຍຊີວິດ ວັນທີ 8 ເດືອນກຸມພາ ປີ 1546.

**ວິວລຽມ ທິນແດວ:** ເກີດຢູ່ປະເທດແວວ ໃນປີ 1494. ໄດ້ສຶກສາຢູ່ທີ່ມະຫາວິທະຍາໄລ ໂອກສະເຟີດ ແລະ ແຄມບະລິດ. ແປພະຄຳພີໃໝ່ເປັນພາສາອັງກິດ. ໄດ້ເຮັດໃຫ້ພະຄຳພີທັງຫລາຍມີໄວ້ສຳລັບຄົນທຳມະດາ ເພື່ອເປີດໂປງຄຳສອນທີ່ຜິດ ແລະ ການກິນສິນບົນຂອງຜູ້ນຳທາງສາດສະໜາ. ເພິ່ນໄດ້ຖືກປະຫານຊີວິດໃນ ວັນທີ 6 ເດືອນຕຸລາ ປີ 1536.

**ຈອນ ຄາລະວິນ:** ເກີດ ວັນທີ 10 ເດືອນກໍລະກົດ ປີ 1509 ຢູ່ປະເທດຝະລັ່ງເສດ. ໄດ້ສຶກສາຢູ່ໃນ ກຸງປາລີ ເພື່ອຈະເປັນຄູນພໍ່. ເປັນຜູ້ນຳທີ່ເຂັ້ມແຂງໃນການເຄື່ອນໄຫວທີ່ຈະແກ້ໄຂສາດສະໜາກາໂຕລິກໃຫ້ດີຂຶ້ນ. ສ່ວນຫລາຍໃຊ້ຊີວິດຂອງເພິ່ນຢູ່ປະເທດສະວິດ. ເພິ່ນໄດ້ສອນວ່າມະນຸດຕາມທຳມະຊາດແລ້ວເປັນຄົນຊົ່ວຊ້າ ແລະ ວ່າມີແຕ່ພະຄຸນຂອງພະເຈົ້າເທົ່ານັ້ນທີ່ຈະສາມາດຊ່ອຍໃຫ້ເຮົາລອດ. ໄດ້ຂຽນຄຳບັນຍາຍຫລາຍຢ່າງກ່ຽວກັບພະຄຳພີ ໄບເບິ້ນ. ເສຍຊີວິດໃນ ວັນທີ 27 ເດືອນພຶດສະພາ ປີ 1564.

ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບຜູ້ແກ້ໄຂໃຫ້ດີຂຶ້ນ ເບິ່ງແຫລ່ງຊ່ອຍເຫລືອໃນຊຸບປະກອບສຳລັບຜູ້ສອນສາດສະໜາ, ດັ່ງຕໍ່ໄປນີ້: James E. Talmage, *Jesus the Christ*, 692–703; M. Russell Ballard, *Our Search for Happiness*, 26–32.

ໝາຍເຫດ

ໃນຂະນະທີ່ໂລກທາງຄິດສະຕຽນໄດ້ຮັບພອນໂດຍຄວາມກ້າຫານ ແລະ ຄວາມສາມາດເຫັນໄກຂອງຜູ້ແກ້ໄຂໃຫ້ດີຂຶ້ນ, ຫລາຍໆປະເທດຊາດ ແລະ ວັດທະນະທຳ ກໍໄດ້ຮັບພອນຄືກັນ ໂດຍຄົນເຫລົ່ານັ້ນທີ່ໄດ້ຮັບສ່ວນ "ວ່າ [ພະເຈົ້າ] ໄດ້ເຫັນເໝາະສົມທີ່ພວກເຂົາຄວນມີ" (ແອລະມາ 29:8). ຄຳສອນຂອງຜູ້ນຳທາງສາດສະໜາຜູ້ອື່ນໄດ້ຊ່ອຍຜູ້ຄົນກາຍເປັນຄົນສຸພາບ ແລະ ມີສິນທຳຫລາຍຂຶ້ນ.

**ບຸດດາ (ໂກທາມາ):** ເກີດ 563 ປີ ກ່ອນຄິດຕະສັກກະລາດ ເປັນລູກຂອງຫົວໜ້າຣິນດູຢູ່ປະເທດເນປານ. ເປັນຫ່ວງກັບຄວາມທຸກທໍລະມານທີ່ເພິ່ນໄດ້ເຫັນອ້ອມຂ້າງເພິ່ນ. ເພິ່ນໄດ້ລົບໜີຈາກພະລາຊະວັງທີ່ງາມຫລູຫລາຂອງພໍ່ເພິ່ນ, ຕັດຂາດຈາກໂລກ, ແລະ ໃຊ້ຊີວິດຢູ່ໃນຄວາມທຸກຍາກ. ໃນການຊອກຫາຄວາມສະຫວ່າງ, ເພິ່ນຄົ້ນພົບສິ່ງທີ່ເພິ່ນເອີ້ນວ່າ "ເສັ້ນທາງແຫ່ງການພົ້ນທຸກ." ເພິ່ນອ້າງວ່າໄດ້ເຖິງນິພານແລ້ວ, ຢູ່ສະພາບໝົດຄວາມເປັນຫ່ວງ, ຄວາມເຈັບປວດ, ຫລື ຄວາມຈິງຂອງໂລກພາຍນອກ. ກາຍເປັນຄູແຫ່ງສັງຄົມຂອງຄູບາ.

**ຂົງຈື້:** ເກີດ 551 ປີ ກ່ອນຄິດຕະສັກກະລາດ. ເປັນເດັກກຳພ້າແຕ່ຍັງນ້ອຍ. ເປັນອາຈານສອນຄົນທຳອິດໃນ ປະເທດຈີນ. ເພິ່ນເປັນນັກຄິດກ່ຽວກັບສິນທຳ ແລະ ສັງຄົມຢ່າງຍິ່ງໃຫຍ່ທີ່ສຸດຂອງປະເທດຈີນ. ບໍ່ໄດ້ກ່າວຫລາຍກ່ຽວກັບອົງເປັນວິນຍານ ຫລື ອຳນາດອັນສັກສິດ. ມີຄວາມເຊື່ອວ່າ ສະຫວັນໄດ້ໄວ້ວາງໃຈເພິ່ນ ກັບວຽກງານທີ່ສັກສິດເຊັ່ນຜູ້ສະໜັບສະໜູນຂອງຄວາມດີ ແລະ ຄວາມຈິງ.

**ໂມຮາມັດ:** ເກີດໃນປີ ຄ.ສ. 570 ຢູ່ໃນ ເມືອງ ເມຄາ. ເປັນເດັກກຳພ້າແຕ່ຍັງນ້ອຍ. ມີຊີວິດໃນຄວາມທຸກຍາກ. ມີຊື່ສຽງເປັນຜູ້ໄກ່ເກຍທີ່ໄວ້ວາງໃຈໄດ້. ແຕ່ງງານເມື່ອມີອາຍຸໄດ້ 25 ປີ. ໃນປີ 610, ເພິ່ນອະທິຖານ ແລະ ນັ່ງທຳຢູ່ພູເຂົາ ຮິລາ. ໄດ້ກ່າວວ່າທູດສະຫວັນ ຄັບລິເອນ ປາກົດກາຍຕໍ່ເພິ່ນ ແລະ ໄດ້ນຳຂ່າວສານຈາກ ອາລາ (ພະເຈົ້າ) ມາໃຫ້. ອ້າງວ່າໄດ້ຮັບການຕິດຕໍ່ຈາກພະເຈົ້າຜ່ານ ຄັບລິເອນ ຈາກປີ 620 ເຖິງ 632. ການຕິດຕໍ່ເຫລົ່ານີ້, ເຊິ່ງເພິ່ນໄດ້ທ່ອງຂຶ້ນໃຈໃຫ້ສານຸສິດຂອງເພິ່ນ, ຕໍ່ມາບົດທ່ອງຂຶ້ນໃຈນີ້ ໄດ້ຂຽນໄວ້ໃນ ໂຄລານ, ເຊິ່ງແມ່ນ ພະຄຳພີສັກສິດຂອງສາດສະໜາອິດສະລາມ.

ໝາຍເຫດ

# ແຜນແຫ່ງຄວາມລອດ



## ເປົ້າໝາຍຂອງທ່ານ

ເມື່ອທ່ານສອນ, ໃຫ້ຕຽມຜູ້ສົນໃຈຂອງທ່ານໃຫ້ມີຄ່າຄວນທີ່ຈະຮັບບັບຕິດສະມາ ເຊິ່ງໄດ້ສອນໄວ້ ໃນ Doctrine and Covenants 20:37 ແລະ ໃນຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ. ວິທີນີ້ຈະປະສົບຜົນ ສຳເລັດດີທີ່ສຸດ ໂດຍເຊື້ອເຊີນຜູ້ສົນໃຈຂອງທ່ານໃຫ້ເຮັດ ແລະ ຮັກສາຄຳໝັ້ນສັນຍາທີ່ບົ່ງໄວ້ລ້າງລຸ່ມນີ້.

### ຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ

- ທ່ານເຊື່ອບໍ່ວ່າພະເຈົ້າເປັນພະບິດາຊົ່ວນິລັນດອນຂອງພວກເຮົາ?
- ທ່ານເຊື່ອບໍ່ວ່າພະເຢຊູຄຣິດເປັນພະບຸດຂອງພະເຈົ້າ, ພະຜູ້ຊ່ອຍໃຫ້ລອດ ແລະ ພະຜູ້ໄຖ່ຂອງໂລກ?
- ທ່ານເຕັມໃຈທີ່ຈະຮັກສາວັນຊະບາໂຕໃຫ້ສັກສິດ, ຮ່ວມດ້ວຍການຮັບພິທີສິນລະລຶກທຸກໆອາທິດ ແລະ ໃຫ້ການຮັບໃຊ້ສະມາຊິກດ້ວຍກັນບໍ?

### ຄຳໝັ້ນສັນຍາ

- ທ່ານຈະອະທິຖານເພື່ອໃຫ້ຮູ້ວ່າສິ່ງທີ່ພວກເຮົາສອນເປັນຄວາມຈິງບໍ?
- ທ່ານຈະກັບໃຈຈາກບາບຂອງທ່ານບໍ?
- ທ່ານຈະໄປໂບດນຳພວກເຮົາບໍ່ວັນອາທິດນີ້?
- ທ່ານຈະເຮັດຕາມຕົວຢ່າງຂອງພະຜູ້ຊ່ອຍໃຫ້ລອດ ແລະ ຮັບບັບຕິດສະມາໃນ (ວັນທີ) ບໍ?
- ພວກເຮົາຂໍນັດເວລາມາຢ້ຽມຢາມເທື່ອໜ້າໄດ້ບໍ?
- ພະບັນຍັດຈາກບົດຮຽນທີ 4 ທີ່ທ່ານເລືອກເອົາມາຮ່ວມ.

## ການຊ່ອຍເຫລືອຄົນອື່ນໆໃຫ້ຮຽນຮູ້ກ່ຽວກັບພະເຢຊູຄຣິດ

ຜູ້ສອນສາດສະໜາຄວນສະແດງປະຈັກພະຍານເຖິງພະເຢຊູຄຣິດ ແລະ ເຊື້ອເຊີນທຸກຄົນໃຫ້ມາສູ່ພະອົງ ເພື່ອເຂົາທັງຫລາຍຈະໄດ້ຮັບຄວາມລອດ. ການສອນທີ່ແຈ່ມແຈ້ງກ່ຽວກັບພະຜູ້ຊ່ອຍໃຫ້ລອດ ເປັນສິ່ງສຳຄັນສຳລັບຜູ້ທີ່ຮູ້ໜ້ອຍໜຶ່ງ ຫລື ຜູ້ທີ່ບໍ່ຮູ້ຫຍັງເລີຍກ່ຽວກັບພະອົງ. ພະຄຳພີມໍມອນ: ປະຈັກ ພະຍານອີກຢ່າງໜຶ່ງເຖິງພະເຢຊູຄຣິດ ແມ່ນເພື່ອຊ່ອຍມະນຸດທຸກໆຄົນໃຫ້ຮູ້ວ່າ "ພະເຢຊູຄືພະຄຣິດ, . . . ປາກົດຕົວແກ່ປະຊາຊາດທັງຫລາຍ" (ໜ້າຫົວເລື່ອງຂອງ

ພະຄຳພີມໍມອນ) ວິທີໜຶ່ງທີ່ໄດ້ຜົນຫລາຍທີ່ສຸດໃນການສອນ ແລະ ສະແດງປະຈັກພະຍານກ່ຽວກັບພະຜູ້ຊ່ອຍໃຫ້ລອດ ແມ່ນການອ່ານພະຄຳພີມໍມອນນຳກັນ. ບົດຄວາມຈາກພະຄຳພີເຫລັ້ມອື່ນໆ ກໍສາມາດຊ່ອຍໃຫ້ເປັນປະໂຫຍດໄດ້ຄືກັນ.

ໃຫ້ພິຈາລະນາຂໍ້ສະເໜີຂ້າງລຸ່ມນີ້. ຂໍ້ເຫລົ່ານີ້ສາມາດໃຊ້ເປັນພາກສ່ວນໃນບົດຮຽນນີ້ ຫລື ໃນບົດຮຽນອື່ນໆ ຫລື ເປັນບົດຮຽນຂອງມັນເອງ. ເມື່ອເຫັນວ່າເປັນປະໂຫຍດ, ໃຫ້ເຮັດວິທີດຽວກັນນີ້ຫລາຍໆເທື່ອກ່ອນ ແລະ ຫລັງຈາກຜູ້ສົນໃຈຮັບບັບຕິດສະມາ ແລະ ການຢືນຢັນ.

| | |
|---|---|
| ໜ້າຫົວເລື່ອງ ແລະ ຄຳນຳ | ໃຫ້ຄວາມແຈ່ມແຈ້ງເຖິງຈຸດປະສົງຂອງພະຄຳພີ. |
| 1 Nephi 10–11 | ລີໄຮ ແລະ ນີໄຟ ສະແດງປະຈັກພະຍານກ່ຽວກັບພະຜູ້ຊ່ອຍໃຫ້ລອດ. |
| 1 Nephi 19 | ນີໄຟ ເລົ່າຄຳພະຍາກອນກ່ຽວກັບພາລະກິດ ແລະ ການຊົດໃຊ້ຂອງພະຜູ້ຊ່ອຍໃຫ້ລອດ. |
| 2 ນີໄຟ 2 | ລີໄຮ ສະແດງປະຈັກພະຍານກ່ຽວກັບພະຜູ້ຊ່ອຍໃຫ້ລອດວ່າເປັນພະຜູ້ໄຖ່. |
| 2 ນີໄຟ 9 | ຢາໂຄບ ສະແດງປະຈັກພະຍານກ່ຽວກັບການຊົດໃຊ້. |
| 2 ນີໄຟ 31–33 | ນີໄຟ ສອນກ່ຽວກັບຄຳສອນຂອງພະຄິດ. |
| ອີນັດ | ອີນັດ ມີປະສົບການກ່ຽວກັບອຳນາດຂອງການຊົດໃຊ້. |
| ໂມໄຊຢາ 2–5 | ກະສັດ ເບັນຢາມິນ ສອນກ່ຽວກັບພະຄິດ. |
| Mosiah 12–16 | ອາບິນາໄດ ສະລະຊີວິດໃນການສະແດງປະຈັກພະຍານກ່ຽວກັບພະເຢຊູຄິດ. |
| ແອລະມາ 5, Alma 7 | ແອລະມາ ສະແດງປະຈັກພະຍານກ່ຽວກັບພະຜູ້ຊ່ອຍໃຫ້ລອດ. |
| Alma 17–22 | ຊາວເລມັນໄດ້ຮັບປະຈັກພະຍານກ່ຽວກັບພະເຢຊູຄິດ. |
| ແອລະມາ 34 | ອາມູເລກ ສະແດງປະຈັກພະຍານກ່ຽວກັບການຊົດໃຊ້. |
| Alma 36 | ແອລະມາ ມີປະສົບການກ່ຽວກັບອຳນາດຂອງການຊົດໃຊ້ຂອງພະເຢຊູຄິດ. |
| ແອລະມາ 40–42 | ແອລະມາ ສະແດງປະຈັກພະຍານກ່ຽວກັບຄວາມເປັນຄືນມາຈາກຕາຍ ແລະ ການຊົດໃຊ້ |
| Helaman 5 | ນີໄຟ ແລະ ລີໄຮ ເປັນເຄື່ອງມືໃນພະຫັດຂອງພະເຈົ້າເພື່ອຈະເປັນພະຍານກ່ຽວກັບພະຜູ້ຊ່ອຍໃຫ້ລອດ. |
| 3 Nephi 9–10 | ພະຜູ້ຊ່ອຍໃຫ້ລອດ ເຊື້ອເຊີນຜູ້ຄົນໃຫ້ມາສູ່ພະອົງ. |
| 3 ນີໄຟ 11–18 | ພະຜູ້ຊ່ອຍໃຫ້ລອດ ສອນຊາວນີໄຟກ່ຽວກັບພະບິດາ ແລະ ຄຳສອນຂອງພະອົງ. |
| 3 ນີໄຟ 27 | ພະຜູ້ຊ່ອຍໃຫ້ລອດ ສອນພະກິດຕິຄຸນຂອງພະອົງ. |
| Ether 3 | ນ້ອງຊາຍຂອງຢາເລັດເຫັນພະຜູ້ຊ່ອຍໃຫ້ລອດ. |
| Ether 12 | ອີເທີ ແລະ ໂມໂລໄນ ສະແດງປະຈັກພະຍານກ່ຽວກັບພະຜູ້ຊ່ອຍໃຫ້ລອດ ແລະ ອຳນາດຂອງການຊົດໃຊ້ຂອງພະອົງ. |
| ໂມໂລໄນ 7–8 | ມໍມອນ ສອນກ່ຽວກັບຄວາມຮັກອັນບໍລິສຸດຂອງພະຄິດ ແລະ ການຊົດໃຊ້ຂອງພະອົງ. |
| ໂມໂລໄນ 10 | ໂມໂລໄນ ເຊື້ອເຊີນມະນຸດທຸກໆຄົນໃຫ້ມາສູ່ພະຄິດ ແລະ ຖືກເຮັດໃຫ້ດີພ້ອມໃນພະອົງ. |
| "ພະຄິດທີ່ຊົງພະຊົນ" | ສາດສະດາ ແລະ ອັກຄະສາວົກ ສະແດງປະຈັກພະຍານກ່ຽວກັບພະຜູ້ຊ່ອຍໃຫ້ລອດ. |

ໝາຍເຫດ

## ຊີວິດກ່ອນເກີດ: ຈຸດປະສົງ ແລະ ແຜນຂອງພະອົງສຳລັບເຮົາ

ຫລາຍຄົນສົງໄສວ່າ, "ເຮົາມາຈາກໃສ? ເປັນຫຍັງເຮົາຢູ່ນີ້? ເຮົາຈະໄປໃສຕໍ່?" ແຜນແຫ່ງຄວາມລອດໃຫ້ຄຳຕອບຕໍ່ຄຳຖາມເຫລົ່ານີ້.

ບົດຮຽນທີ 2:
ແຜນແຫ່ງຄວາມລອດ

ໝາຍເຫດ

ພະເຈົ້າເປັນພະບິດາຂອງວິນຍານຂອງເຮົາແຕ່ລະຄົນ. ເຮົາເປັນລູກຂອງພະອົງແທ້ໆ, ແລະ ພະອົງຊົງຮັກເຮົາ. ເຮົາໄດ້ຢູ່ກັບພະບິດາຜູ້ສະຖິດໃນສະຫວັນ ໃນຖານະເປັນລູກທາງວິນຍານຂອງພະອົງ ກ່ອນເຮົາມາເກີດຢູ່ໃນໂລກນີ້. ເຖິງຢ່າງໃດກໍຕາມ, ເຮົາບໍ່ຄືພະບິດາເທິງສະຫວັນຂອງເຮົາ, ຫລື ບໍ່ມີທາງທີ່ເຮົາຈະເປັນເໝືອນດັ່ງພະອົງ ແລະ ຊື່ນຊົມກັບພອນທັງຫລາຍທີ່ພະອົງຊື່ນຊົມ ປາດສະຈາກປະສົບການກັບຊີວິດທີ່ມີຮ່າງກາຍຢູ່ໃນໂລກມະນຸດ.

ຈຸດປະສົງທັງໝົດຂອງພະເຈົ້າ—ວຽກງານ ແລະ ລັດສະໝີພາບຂອງພະອົງ—ແມ່ນເພື່ອໃຫ້ເຮົາແຕ່ລະຄົນສາມາດຊື່ນຊົມກັບພອນທັງຫລາຍຂອງພະອົງ. ພະອົງໄດ້ໃຫ້ແຜນທີ່ດີພ້ອມເພື່ອເຮັດໃຫ້ຈຸດປະສົງຂອງພະອົງບັນລຸຜົນສຳເລັດ. ເຮົາໄດ້ເຂົ້າໃຈ ແລະ ຍອມຮັບແຜນນີ້ກ່ອນທີ່ເຮົາຈະລົງມາຢູ່ໃນໂລກ. ໃນພະຄຳພີ ແຜນຂອງພະເຈົ້າຖືກເອີ້ນວ່າ ແຜນທີ່ເຕັມໄປດ້ວຍຄວາມເມດຕາ, ແຜນແຫ່ງຄວາມສຸກ, ແຜນແຫ່ງການໄຖ່, ແລະ ແຜນແຫ່ງຄວາມລອດ.

ພະເຢຊູຄຣິດເປັນຜູ້ສຳຄັນໃນແຜນຂອງພະເຈົ້າ. ຜ່ານການຊົດໃຊ້ຂອງພະອົງ, ພະເຢຊູຄຣິດເຮັດໃຫ້ຈຸດປະສົງຂອງພະບິດາປະສົບຜົນສຳເລັດ ແລະ ເຮັດໃຫ້ເຮົາແຕ່ລະຄົນສາມາດຊື່ນຊົມກັບຄວາມເປັນອຳມະຕະ ແລະ ຊີວິດນິລັນດອນ. ຊາຕານ, ເຊິ່ງແມ່ນມານ, ເປັນສັດຕູຂອງແຜນຂອງພະເຈົ້າ.

ສິດທິ, ຫລືວ່າ ຄວາມສາມາດທີ່ຈະເລືອກ, ແມ່ນໜຶ່ງໃນຂອງປະທານທີ່ຍິ່ງໃຫຍ່ທີ່ພະເຈົ້າໄດ້ມອບໃຫ້ລູກໆຂອງພະອົງ. ຄວາມເຕີບໂຕນິລັນດອນຂອງເຮົາຂຶ້ນຢູ່ກັບວິທີເຮົາໃຊ້ຂອງປະທານນີ້. ເຮົາຕ້ອງເລືອກວ່າ ເຮົາຈະເຮັດຕາມພະເຢຊູຄຣິດ ຫລື ເຮັດຕາມຊາຕານ.

ເຮົາໄດ້ແຍກຈາກພະເຈົ້າທາງຮ່າງກາຍໃນລະຫວ່າງມີຊີວິດຢູ່ໃນໂລກ, ແຕ່ວ່າພະອົງປາດຖະໜາໃຫ້ລູກໆຂອງພະອົງທຸກຄົນພົບຄວາມສະຫງົບໃນຊີວິດນີ້ ແລະ ມີຄວາມຊື່ນຊົມອັນເຕັມປ່ຽມໃນທີ່ປະທັບຂອງພະອົງຫລັງຈາກຊີວິດນີ້. ພະອົງປາດຖະໜາໃຫ້ເຮົາເປັນເໝືອນດັ່ງພະອົງ.

### ການສຶກສາພະຄຳພີ

**ລູກໆຂອງພະເຈົ້າ**

D&C 93:29 | ເຮັບເລີ 12:9 | ກິດຈະການ 17:29

**ຈຸດປະສົງຂອງພະເຈົ້າ**

Moses 1:39 | ໂຢຮັນ 17:3

**ຊີວິດກ່ອນມະຕະ**

D&C 138:53–56 | Abraham 3:22–26 | Topical Guide, "Man, Antemortal Existence of" | Moses 3:5 | ເຢເລມີຢາ 1:5

## ການສ້າງ

ພາຍໃຕ້ການຊີ້ນຳຂອງພະບິດາ, ພະເຢຊູຄຣິດໄດ້ສ້າງໂລກໃຫ້ເປັນບ່ອນທີ່ເຮົາອາໄສຢູ່ ແລະ ບ່ອນທີ່ເຮົາໄດ້ຮັບປະສົບການ. ເພື່ອເຮົາຈະເຕີບໂຕ ແລະ ເປັນເໝືອນດັ່ງພະເຈົ້າ, ເຮົາແຕ່ລະຄົນໄດ້ຮັບເອົາຮ່າງກາຍ ແລະ ຖືກທົດສອບລະຫວ່າງເວລາຂອງການພິສູດຢູ່ໃນໂລກ. ຂະນະທີ່ຢູ່ໃນໂລກ ເຮົາຫ່າງຈາກທີ່ປະທັບຂອງພະເຈົ້າ. ເຮົາບໍ່ຈື່ຊີວິດກ່ອນເກີດຂອງເຮົາ. ເຮົາຕ້ອງດຳເນີນຊີວິດດ້ວຍສັດທາ ບໍ່ແມ່ນຕາມທີ່ຕາເຫັນ.

### ການສຶກສາພະຄຳພີ

| | | |
|---|---|---|
| 1 ນີໄຟ 17:36 | Moses 2:1 | ໂຢຮັນ 1:1–3 (JST) |
| Alma 30:44 | Moses 6:63 | 2 ໂກລິນໂທ 5:6–7 |
| D&C 88:41–47 | Abraham 3:24–25 | |

ໝາຍເຫດ

## ສິດທິ ແລະ ການຕົກຂອງ ອາດາມ ແລະ ເອວາ

ອາດາມ ແລະ ເອວາ ແມ່ນລູກທຳອິດຂອງພະເຈົ້າທີ່ໄດ້ມາຢູ່ໃນໂລກ. ພະເຈົ້າໄດ້ສ້າງ ອາດາມ ແລະ ເອວາ ແລະ ໃຫ້ເຂົາເຈົ້າອາໄສຢູ່ໃນສວນເອເດນ. ອາດາມ ແລະ ເອວາ ໄດ້ຖືກສ້າງຂຶ້ນໃຫ້ມີຮູບຮ່າງເໝືອນກັນກັບພະເຈົ້າ, ກັບຮ່າງກາຍທີ່ມີເນື້ອໜັງ ແລະ ກະດູກ. ຕອນທີ່ ອາດາມ ແລະ ເອວາ ອາໄສຢູ່ໃນສວນ, ເຂົາເຈົ້າຍັງຢູ່ໃນທີ່ປະທັບຂອງພະເຈົ້າ ແລະ ສາມາດມີຊີວິດຕະຫລອດໄປ. ເຂົາເຈົ້າມີຊີວິດທີ່ບໍລິສຸດ, ແລະ ພະເຈົ້າຈັດຫາທຸກສິ່ງທີ່ເຂົາເຈົ້າຕ້ອງການ.

ໃນສວນເອເດນ, ພະເຈົ້າໄດ້ໃຫ້ສິດທິແກ່ ອາດາມ ແລະ ເອວາ. ພະອົງສັ່ງເຂົາເຈົ້າບໍ່ໃຫ້ກິນໝາກໄມ້ທີ່ຕ້ອງຫ້າມ, ຫລື ໝາກໄມ້ຈາກຕົ້ນໄມ້ທີ່ຮູ້ຄວາມດີ ແລະ ຄວາມຊົ່ວ. ການເຊື່ອຟັງພະບັນຍັດຂໍ້ນີ້ໝາຍຄວາມວ່າ ເຂົາເຈົ້າຈະມີຊີວິດສືບຕໍ່ໃນສວນໄດ້, ແຕ່ເຂົາເຈົ້າບໍ່ສາມາດເຕີບໂຕໄດ້ໃນສວນ ເພາະວ່າເຂົາເຈົ້າບໍ່ສາມາດມີ ປະສົບການທີ່ກົງກັນຂ້າມໃນໂລກມະນຸດ. ເຂົາເຈົ້າຈະບໍ່ຮູ້ຈັກຄວາມຊື່ນຊົມ ເພາະເຂົາເຈົ້າບໍ່ເຄີຍຮູ້ຈັກ ຄວາມເສຍໃຈ ແລະ ຄວາມເຈັບປວດ.

ຊາຕານໄດ້ລໍ້ລວງ ອາດາມ ແລະ ເອວາ ໃຫ້ກິນໝາກໄມ້ທີ່ຕ້ອງຫ້າມ, ແລະ ເຂົາເຈົ້າໄດ້ກິນ. ນີ້ຄືສ່ວນໜຶ່ງຂອງແຜນຂອງພະເຈົ້າ. ເພາະການເລືອກນີ້, ເຂົາເຈົ້າໄດ້ຖືກຂັບໄລ່ອອກຈາກສວນ ແລະ ຈາກທີ່ປະທັບຂອງພະເຈົ້າ. ເຫດການນີ້ຖືກເອີ້ນວ່າ ການຕົກ. ການຫ່າງຈາກທີ່ປະທັບຂອງພະເຈົ້າແມ່ນການຕາຍທາງວິນຍານ. ອາດາມ ແລະ ເອວາ ກາຍເປັນມະຕະ—ຮ່າງກາຍສາມາດຕາຍໄດ້, ໝາຍຄວາມວ່າຮ່າງກາຍ ແລະ ວິນຍານຈະແຍກອອກຈາກກັນ. ເມື່ອນັ້ນເຂົາເຈົ້າສາມາດປະສົບການກັບພະຍາດ ແລະ ຄວາມທຸກທໍລະມານທຸກຮູບແບບ. ເຂົາເຈົ້າມີສິດທິໃນສິນທຳ ຫລື ສາມາດເລືອກລະຫວ່າງຄວາມດີ ແລະ ຄວາມຊົ່ວ. ສິ່ງນີ້ສາມາດເຮັດໃຫ້ເຂົາເຈົ້າຮຽນຮູ້ ແລະ ເຕີບໂຕຂຶ້ນ ແລະ ສາມາດເຮັດໃຫ້ເຂົາເຈົ້າເລືອກສິ່ງທີ່ຜິດ ແລະ ມີບາບ. ນອກຈາກນັ້ນແລ້ວ, ເຂົາເຈົ້າສາມາດມີລູກໄດ້, ດັ່ງນັ້ນລູກໆທາງວິນຍານຂອງພະເຈົ້າທັງຫລາຍຈຶ່ງຈະສາມາດມາເກີດໃນໂລກ, ເພື່ອຮັບເອົາຮ່າງກາຍ, ແລະ ຖືກທົດສອບ. ມີວິທີດຽວເທົ່ານັ້ນທີ່ລູກໆຂອງພະເຈົ້າຈະເຕີບໂຕ ແລະ ເປັນເໝືອນພະອົງ.

### ການສອນກ່ຽວກັບການຕົກ

ເວລາທ່ານສອນຄຳສອນນີ້ຄັ້ງທຳອິດ, ຢ່າສອນທຸກສິ່ງທີ່ທ່ານຮູ້ກ່ຽວກັບການຕົກ. ໃຫ້ອະທິບາຍແບບງ່າຍໆວ່າ ພະເຈົ້າໄດ້ເລືອກລູກພະອົງສອງຄົນ, ອາດາມ ແລະ ເອວາ, ໃຫ້ເປັນພໍ່ແມ່ຄູ່ທຳອິດໃນໂລກ. ຫລັງຈາກເຂົາເຈົ້າລ່ວງລະເມີດ, ເຂົາເຈົ້າບໍ່ສາມາດກັບຄືນໄປຢູ່ກັບພະບິດາເທິງສະຫວັນອີກ. ພະຜູ້ເປັນເຈົ້າໄດ້ກ່າວຕໍ່ ອາດາມ ແລະ ໄດ້ສອນລາວເຖິງແຜນແຫ່ງຄວາມລອດ ແລະ ການໄຖ່ໂດຍຜ່ານພະຜູ້ເປັນເຈົ້າພະເຢຊູຄຣິດ. ໂດຍການປະຕິບັດຕາມແຜນນັ້ນ, ອາດາມ ແລະ ຄອບຄົວຂອງລາວ ສາມາດມີຄວາມສຸກໃນຊີວິດນີ້ ແລະ ກັບຄືນໄປຢູ່ກັບພະເຈົ້າອີກ (see Alma 18:36; 22:12–14).

### ການສຶກສາພະຄຳພີ

**ຢູ່ໃນສວນ**

| | | |
|---|---|---|
| 2 ນີໄຟ 2 | Moses 3:15–17 | ປະຖົມມະການ 1:26–31 |
| Moses 2:26–31 | Moses 5:11 | ປະຖົມມະການ 2:15–17 |

**ການຕົກ**

| | | |
|---|---|---|
| 2 ນີໄຟ 2:25 | Moses 4 | ປະຖົມມະການ 3 |
| ແອລະມາ 12:22–34 | Moses 5:10–12 | |

## ຊີວິດຂອງເຮົາໃນໂລກ

ຊີວິດໃນໂລກແມ່ນໂອກາດ ແລະ ພອນ. ຈຸດປະສົງຂອງເຮົາໃນຊີວິດນີ້ແມ່ນເພື່ອມີຄວາມສຸກ ແລະ ຕຽມຕົວທີ່ຈະກັບຄືນສູ່ທີ່ປະທັບຂອງພະເຈົ້າ. ໃນຄວາມເປັນມະຕະ ເຮົາມີຊີວິດໃນສະພາບທີ່ເຮົາຈະປະສົບກັບການ

ໝາຍເຫດ

ຕາຍທາງຮ່າງກາຍ ແລະ ທາງວິນຍານ. ພະເຈົ້າມີຮ່າງກາຍອຳມະຕະດ້ວຍເນື້ອໜັງ ແລະ ກະດູກ ທີ່ດີພ້ອມ ແລະ ເປັນຕາສັນລະເສີນ. ເພື່ອຈະເປັນເໝືອນດັ່ງພະເຈົ້າ ແລະ ກັບຄືນສູ່ທີ່ປະທັບຂອງພະອົງ, ເຮົາຕ້ອງມີຮ່າງກາຍອຳມະຕະດ້ວຍເນື້ອໜັງ ແລະ ກະດູກທີ່ດີພ້ອມຄືກັນ. ແຕ່, ຍ້ອນວ່າການຕົກຂອງ ອາດາມ ແລະ ເອວາ, ທຸກໆຄົນໃນໂລກ ຜູ້ມີຮ່າງກາຍມະຕະ ແລະ ບໍ່ດີພ້ອມ ໃນທີ່ສຸດກໍຈະຕາຍ. ຖ້າບໍ່ແມ່ນຍ້ອນພະຜູ້ຊ່ອຍໃຫ້ລອດ ພະເຢຊູຄຣິດ, ຄວາມຕາຍຈະເປັນຈຸດຈົບຂອງຄວາມຫວັງທັງໝົດ ແລະ ເຮົາຈະບໍ່ໄດ້ຢູ່ກັບພະບິດາເທິງສະຫວັນໃນອານາຄົດອີກ.

ນອກຈາກການຕາຍທາງຮ່າງກາຍແລ້ວ, ບາບເປັນອຸບປະສັກອັນຍິ່ງໃຫຍ່ທີ່ກີດກັນເຮົາບໍ່ໃຫ້ເປັນເໝືອນດັ່ງພະບິດາຜູ້ສະຖິດໃນສະຫວັນຂອງເຮົາ ແລະ ກັບຄືນສູ່ທີ່ປະທັບຂອງພະອົງ. ໃນສະພາບມະຕະຂອງເຮົາ, ເຮົາຈະຍອມຕໍ່ການລໍ້ລວງເລື້ອຍໆ, ເຮັດຜິດຕໍ່ພະບັນຍັດ, ແລະ ເຮັດບາບ. ໃນລະຫວ່າງຊີວິດຂອງເຮົາໃນໂລກ ເຮົາແຕ່ລະຄົນຈະເຮັດຄວາມຜິດ. ເຖິງວ່າບາງຄັ້ງເບິ່ງຄືວ່າບໍ່ແມ່ນແບບນັ້ນ, ແຕ່ບາບຈະນຳເຮົາໄປສູ່ຄວາມເປັນທຸກ. ບາບເປັນເຫດໃຫ້ມີຄວາມຮູ້ສຶກວ່າເຮັດຜິດ ແລະ ເຮັດໃຫ້ລະອາຍໃຈ. ຍ້ອນບາບຂອງເຮົາ, ເຮົາຈຶ່ງບໍ່ສາມາດກັບຄືນໄປຢູ່ກັບພະບິດາເທິງສະຫວັນ ນອກຈາກວ່າເຮົາໄດ້ຮັບການອະໄພ ແລະ ຖືກເຮັດໃຫ້ສະອາດແລ້ວ.

ໃນລະຍະທີ່ເຮົາຢູ່ໃນໂລກມະນຸດ, ເຮົາມີປະສົບການທີ່ເຮັດໃຫ້ເຮົາມີຄວາມສຸກ. ເຮົາກໍມີປະສົບການທີ່ເຮັດໃຫ້ເຮົາມີຄວາມເຈັບປວດ ແລະ ເສຍໃຈຄືກັນ, ເຊິ່ງຄວາມເຈັບປວດ ແລະ ເສຍໃຈບາງຢ່າງເກີດຈາກການກະທຳບາບຂອງຄົນອື່ນ. ປະສົບການເຫລົ່ານີ້ໃຫ້ໂອກາດເຮົາໄດ້ຮຽນ ແລະ ເຕີບໂຕ, ເພື່ອແບ່ງແຍກຄວາມດີຈາກຄວາມຊົ່ວ, ແລະ ເພື່ອເຮັດການເລືອກຕ່າງໆ. ພະເຈົ້າສົ່ງເສີມເຮົາໃຫ້ເຮັດຄວາມດີ. ຊາຕານລໍ້ລ່ວງເຮົາໃຫ້ເຮັດບາບ. ຄືກັນກັບການຕາຍທາງຮ່າງກາຍ, ເຮົາບໍ່ສາມາດເອົາຊະນະຜົນສະທ້ອນຂອງບາບດ້ວຍຕົວເຮົາເອງ. ເຮົາຊ່ອຍຕົວເອງບໍ່ໄດ້ປາດສະຈາກການຊົດໃຊ້ຂອງພະເຢຊູຄຣິດ.

## ການສຶກສາພະຄຳພີ

### ລະຍະເວລາສຳລັບພິສູດ ຫລື ທົດສອບ

| | | |
|---|---|---|
| 2 ນີໄຟ 2:21 | ແອລະມາ 12:21–24 | Abraham 3:25–26 |
| 2 ນີໄຟ 9:27 | ແອລະມາ 34:31–35 | |
| ໂມໄຊຢາ 3:19 | ແອລະມາ 42:2–10 | |

### ການເລືອກ

| | |
|---|---|
| 2 ນີໄຟ 2:26–29 | *ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ,* "ສິດທິ ແລະ ຄວາມຮັບຜິດຊອບ" |
| ໂຢຊວຍ 24:15 | |

### ຄວາມດີ ແລະ ຄວາມຊົ່ວ

ໂມໂຣໄນ 7:12–19

### ບາບ

| | | |
|---|---|---|
| ໂລມ 3:23 | 1 ໂຢຮັນ 1:8–10 | 1 ໂຢຮັນ 3:4 |

### ຄົນທີ່ບໍ່ສະອາດບໍ່ສາມາດຢູ່ນຳພະເຈົ້າ

| | | |
|---|---|---|
| 1 Nephi 10:20–21 | 3 ນີໄຟ 27:19 | Moses 6:57 |
| ແອລະມາ 41:10–11 | | |

ໝາຍເຫດ

## ການຊົດໃຊ້



ກ່ອນໂລກໄດ້ຖືກຈັດຕັ້ງຂຶ້ນ, ພະບິດາເທິງສະຫວັນຂອງເຮົາໄດ້ເລືອກພະເຢຊູຄຣິດໃຫ້ເປັນພະຜູ້ຊ່ອຍໃຫ້ລອດ ແລະ ພະຜູ້ໄຖ່ຂອງເຮົາ. ການເສຍສະລະຊົດໃຊ້ຂອງພະເຢຊູຄຣິດ ໄດ້ເຮັດໃຫ້ເຮົາສາມາດເອົາຊະນະຜົນສະທ້ອນຂອງການຕົກ. ຕັ້ງແຕ່ຕອນເລີ່ມຕົ້ນຂອງໂລກ ສາດສະດາທຸກໆຄົນໄດ້ສະແດງປະຈັກພະຍານກ່ຽວກັບພະເຢຊູຄຣິດ ວ່າພະອົງເປັນພະຜູ້ໄຖ່ຂອງເຮົາ.

ເຮົາທຸກຄົນຈະປະສົບການຕາຍຂອງຮ່າງກາຍ, ແຕ່ພະເຢຊູຄຣິດໄດ້ເອົາຊະນະອຸບປະສັກໃນການຕາຍຂອງຮ່າງກາຍເພື່ອເຮົາ. ເມື່ອພະອົງສິ້ນພະຊົນເທິງໄມ້ກາງແຂນ, ວິນຍານຂອງພະອົງໄດ້ແຍກອອກຈາກຮ່າງກາຍຂອງພະອົງ. ໃນມື້ທີສາມ, ວິນຍານ ແລະ ຮ່າງກາຍຂອງພະອົງໄດ້ກັບຄືນຫາກັນຊົ່ວນິລັນດອນ, ຈະບໍ່ແຍກຈາກກັນອີກ. ພະອົງໄດ້ປາກົດກາຍຕໍ່ຫລາຍໆຄົນ ແລະ ສະແດງໃຫ້ເຂົາເຫັນວ່າ ພະອົງໄດ້ມີຮ່າງກາຍອາມະຕະທີ່ມີເນື້ອໜັງ ແລະ ກະດູກ. ການຮ່ວມກັນໃໝ່ຂອງຮ່າງກາຍ ແລະ ວິນຍານ ເອີ້ນວ່າຄວາມເປັນຄືນມາຈາກຕາຍ ແລະ ເປັນຂອງປະທານທີ່ໄດ້ສັນຍາໄວ້ໃຫ້ເຮົາແຕ່ລະຄົນ. ເພາະຄວາມເປັນຄືນມາຈາກຕາຍຂອງພະເຢຊູຄຣິດ, ເຮົາທຸກຄົນຈະໄດ້ຄືນມາຈາກຕາຍ ເຖິງແມ່ນວ່າເຮົາຈະເຮັດຄວາມດີ ຫລື ຄວາມຊົ່ວໃນໂລກນີ້ກໍຕາມ. ເຮົາຈະມີຮ່າງກາຍອາມະຕະທີ່ມີເນື້ອໜັງ ແລະ ກະດູກທີ່ດີພ້ອມ ທີ່ຈະບໍ່ເປັນພະຍາດ, ເຈັບປວດ, ຫລື ຕາຍອີກ. ຄວາມເປັນຄືນມາຈາກຕາຍເຮັດໃຫ້ເຮົາສາມາດກັບຄືນສູ່ທີ່ປະທັບຂອງພະເຈົ້າເພື່ອການພິພາກສາ ແຕ່ບໍ່ໄດ້ຮັບປະກັນວ່າເຮົາຈະສາມາດຢູ່ທີ່ປະທັບຂອງພະອົງຫລືບໍ່. ເພື່ອຈະໄດ້ຮັບພອນນັ້ນ, ເຮົາຕ້ອງຖືກຊຳລະຈາກບາບເສຍກ່ອນ.

ພະເຈົ້າໄດ້ສົ່ງພະບຸດທີ່ຮັກຂອງພະອົງ, ພະເຢຊູຄຣິດ, ມາເພື່ອຈະເອົາຊະນະອຸບປະສັກຂອງບາບ ພ້ອມກັນກັບການຕາຍທາງຮ່າງກາຍ. ເຮົາບໍ່ໄດ້ເປັນຜູ້ຮັບຜິດຊອບຕໍ່ການຕົກຂອງ ອາດາມ ແລະ ເອວາ, ແຕ່ເຮົາມີໜ້າທີ່ຮັບຜິດຊອບຕໍ່ບາບຂອງເຮົາເອງ. ພະເຈົ້າຈະບໍ່ຍອມແມ້ວ່າບາບຈະນ້ອຍທີ່ສຸດ, ແລະ ບາບເປັນສິ່ງຂັດຂວາງເຮົາບໍ່ໃຫ້ເຂົ້າໄປໃນທີ່ປະທັບຂອງພະອົງ. ໂດຍຜ່ານພະຄຸນ ແລະ ຄວາມເມດຕາຂອງພະຜູ້ຊ່ອຍໃຫ້ລອດເທົ່ານັ້ນທີ່ເຮົາຈະສະອາດຈາກບາບເພື່ອເຮົາຈະສາມາດຢູ່ກັບພະເຈົ້າອີກ. ສິ່ງນີ້ສາມາດເປັນໄປໄດ້ໂດຍຜ່ານການມີສັດທາໃນພະເຢຊູຄຣິດ, ການກັບໃຈ, ການຮັບບັບຕິດສະມາ, ການຮັບຂອງປະທານແຫ່ງພະວິນຍານບໍລິສຸດ, ແລະ ການອົດທົນຈົນເຖິງທີ່ສຸດ.

ເພື່ອໃຫ້ແຜນແຫ່ງຄວາມລອດບັນລຸຜົນສຳເລັດ, ພະຄຣິດຈຶ່ງໄດ້ຈ່າຍແທນບາບຂອງເຮົາ. ພະອົງເທົ່ານັ້ນທີ່ສາມາດເຮັດແບບນັ້ນໄດ້. ພະອົງໄດ້ຖືກເອີ້ນ ແລະ ຕຽມພ້ອມໃນໂລກກ່ອນເກີດ. ພະອົງເປັນພະບຸດ ທີ່ແທ້ຈິງທາງເນື້ອໜັງຂອງພະເຈົ້າ. ພະອົງບໍ່ມີບາບ ແລະ ເຊື່ອຟັງຕໍ່ພະບິດາຂອງພະອົງທັງໝົດ. ເຖິງແມ່ນວ່າພະອົງໄດ້ຖືກລໍ້ລວງ, ແຕ່ພະອົງບໍ່ເຄີຍຍອມຕໍ່ການລໍ້ລວງ. ເມື່ອພະບິດາຂໍໃຫ້ພະບຸດທີ່ຮັກຂອງພະອົງຈ່າຍຄ່າບາບຂອງໂລກ, ພະເຢຊູຄຣິດໄດ້ຕຽມພ້ອມ ແລະ ເຕັມໃຈ. ການຊົດໃຊ້ຂອງພະອົງຮ່ວມດ້ວຍຄວາມທຸກທໍລະມານຂອງພະອົງໃນສວນເຄັດເຊມາເນ ແລະ ຄວາມທຸກທໍລະມານໃນການສິ້ນພະຊົນຂອງພະອົງຢູ່ເທິງໄມ້ກາງແຂນ, ແລະ ໄດ້ຈົບລົງກັບຄວາມເປັນຄືນມາຈາກຕາຍ. ເຖິງວ່າພະອົງໄດ້ທຸກທໍລະມານ—ເໜືອກວ່າຈະເຂົ້າໃຈໄດ້ ຈົນເລືອດໄຫລອອກຈາກທຸກຮູຂົນຂອງຮ່າງກາຍ ແລະ ຖາມວ່າເປັນໄປໄດ້ບໍ ທີ່ຈະຍົກພາລະນີ້ອອກໄປຈາກພະອົງ—ພະອົງຍອມເຮັດຕາມຄວາມຕ້ອງການຂອງພະບິດາ ແລະ ສຳລັບເຮົາ. ໄຊຊະນະຂອງພະເຢຊູຄຣິດເໜືອການຕາຍທາງວິນຍານໂດຍຄວາມທຸກທໍລະມານຂອງພະອົງ ແລະ ເໜືອການຕາຍທາງຮ່າງກາຍໂດຍຄວາມເປັນຄືນມາຈາກຕາຍຂອງພະອົງນີ້ ຖືກເອີ້ນວ່າ ການຊົດໃຊ້.

ພະຄຣິດສັນຍາວ່າ ຈະອະໄພບາບໃຫ້ເຮົາ ອີງຕາມເງື່ອນໄຂທີ່ວ່າ ເຮົາຕ້ອງຍອມຮັບເອົາພະອົງໂດຍການໃຊ້ສັດທາໃນພະອົງ, ກັບໃຈ, ຮັບບັບຕິດສະມາໂດຍລົງໄປໃນນ້ຳໝົດທັງຕົວ, ແລະ ໂດຍການວາງມືສຳລັບຂອງປະທານແຫ່ງພະວິນຍານບໍລິສຸດ, ແລະ ພະຍາຍາມດ້ວຍຄວາມສັດຊື່ທີ່ຈະຮັກສາພະບັນຍັດຂອງພະອົງຈົນເຖິງວັນສຸດທ້າຍຂອງຊີວິດຂອງເຮົາ. ຜ່ານການກັບໃຈເລື້ອຍໄປນີ້, ເຮົາຈະໄດ້ຮັບການໃຫ້ອະໄພ ແລະ ຖືກຊຳລະຈາກບາບຂອງເຮົາ ໂດຍອຳນາດຂອງພະວິນຍານບໍລິສຸດ. ເຮົາໄດ້ຖືກປົດຈາກຄວາມຮູ້ສຶກຜິດ ແລະ ລະອາຍໃຈ, ແລະ ຜ່ານພະເຢຊູຄຣິດ ເຮົາມີຄ່າຄວນທີ່ຈະກັບຄືນສູ່ທີ່ປະທັບຂອງພະເຈົ້າ.

ບົດຮຽນທີ 2:
ແຜນແຫ່ງຄວາມລອດ

ໝາຍເຫດ

ເມື່ອເຮົາໄວ້ວາງໃຈໃນການຊົດໃຊ້ຂອງພະເຢຊູຄຣິດ, ພະອົງສາມາດຊ່ອຍເຮົາໃຫ້ອົດທົນກັບຄວາມຫຍຸ້ງຍາກ, ຄວາມເຈັບປ່ວຍ, ແລະ ຄວາມເຈັບປວດຂອງເຮົາ. ເຮົາສາມາດເຕັມໄປດ້ວຍຄວາມສຸກ, ຄວາມສະຫງົບ, ແລະ ການປອບໃຈ. ສິ່ງທີ່ບໍ່ຍຸຕິທຳທັງຫລາຍໃນຊີວິດ ສາມາດຖືກແກ້ໄຂໃຫ້ຖືກຕ້ອງໄດ້ ໂດຍຜ່ານການຊົດໃຊ້ຂອງພະເຢຊູຄຣິດ.

ເຖິງຢ່າງໃດກໍຕາມ, ໃນການຈ່າຍຄ່າບາບຂອງເຮົາ, ພະເຢຊູບໍ່ໄດ້ຍົກເວັ້ນເຮົາຈາກໜ້າທີ່ຮັບຜິດຊອບສ່ວນຕົວຂອງເຮົາ. ເຮົາຕ້ອງສະແດງໃຫ້ເຫັນວ່າເຮົາຍອມຮັບພະອົງ ແລະ ວ່າເຮົາຈະປະຕິບັດຕາມພະບັນຍັດຂອງພະອົງ. ຜ່ານຂອງປະທານແຫ່ງການຊົດໃຊ້ເທົ່ານັ້ນ ເຮົາຈຶ່ງຈະສາມາດກັບຄືນໄປຢູ່ກັບພະເຈົ້າອີກ.

### ການສຶກສາພະຄຳພີ

**ຄວາມເປັນຄືນມາຈາກຕາຍ**

| | | |
|---|---|---|
| 2 ນີໄຟ 9:6–7 | D&C 88:27–32 | Topical Guide, “Resurrection” |
| ແອລະມາ 11:42–45 | ລູກາ 24:1–10, 36–39 | Bible Dictionary, “Death,” “Resurrection” |
| ແອລະມາ 40:23 | 1 ໂກລິນໂທ 15:20–23 | |
| ຮີລາມັນ 14:15–19 | 1 ໂກລິນໂທ 14:15—19 (JST) | |

**ການຊົດໃຊ້**

| | | |
|---|---|---|
| 2 ນີໄຟ 2:6–8 | D&C 19:15–19 | 1 ໂຢຮັນ 1:7 |
| Alma 7:11–13 | D&C 45:3–5 | Bible Dictionary, “Atonement” |
| ແອລະມາ 34:8–10 | ໂຢຮັນ 3:16–17 | |

**ພະກິດຕິຄຸນ—ວິທີທາງ**

| | | |
|---|---|---|
| 2 ນີໄຟ 9:1–24 | ແອລະມາ 11:40 | 3 ນີໄຟ 27 |
| 2 ນີໄຟ 31 | 3 ນີໄຟ 11:31–41 | ໂມໂລໄນ 7:27–28 |

## ໂລກວິນຍານ

ເຖິງແມ່ນວ່າພະຄຣິດໄດ້ເອົາຊະນະການຕາຍທາງຮ່າງກາຍ, ແຕ່ຄົນທຸກຄົນຕ້ອງຕາຍ, ເພາະຄວາມຕາຍເປັນສ່ວນໜຶ່ງຂອງການເຕີບໂຕທີ່ປ່ຽນເຮົາຈາກຄວາມເປັນມະຕະຫາຄວາມເປັນອຳມະຕະ. ເວລາຕາຍ, ວິນຍານຂອງເຮົາຈະໄປສູ່ໂລກວິນຍານ. ຄວາມຕາຍບໍ່ໄດ້ປ່ຽນນິໄສຂອງເຮົາ ຫລື ຄວາມປາດຖະໜາຂອງເຮົາທີ່ຈະເຮັດຄວາມດີ ຫລື ຄວາມຊົ່ວ. ຜູ້ທີ່ເລືອກເຊື່ອຟັງພະເຈົ້າໃນຊີວິດນີ້, ຈະມີຊີວິດຢູ່ໃນສະພາບທີ່ມີຄວາມສຸກ, ຄວາມສະຫງົບ, ແລະ ພົ້ນຈາກຄວາມວຸ້ນວາຍ ແລະ ບັນຫາ. ຜູ້ທີ່ເລືອກບໍ່ເຊື່ອຟັງພະເຈົ້າໃນຊີວິດນີ້ ແລະ ບໍ່ກັບໃຈ, ຈະມີຊີວິດຢູ່ໃນສະພາບທີ່ໂສກເສົ້າ. ໃນໂລກວິນຍານພະກິດຕິຄຸນໄດ້ຖືກສອນໃຫ້ແກ່ຜູ້ທີ່ບໍ່ເຊື່ອຟັງພະກິດຕິຄຸນ ຫລື ບໍ່ມີໂອກາດໄດ້ຍິນກ່ຽວກັບພະກິດຕິຄຸນ ຕອນຢູ່ໃນໂລກ. ເຮົາຈະຢູ່ໃນໂລກວິນຍານຈົນກວ່າເຮົາເປັນຄືນມາຈາກຕາຍ.

### ການສຶກສາພະຄຳພີ

**ພະກິດຕິຄຸນໄດ້ຖືກສອນໃຫ້ຄົນຕາຍ**

| | | |
|---|---|---|
| D&C 138 | 1 ເປໂຕ 3:19–20 | 1 ເປໂຕ 4:6 |

**ຄວາມຕາຍ ແລະ ໂລກວິນຍານ**

| | | |
|---|---|---|
| ແອລະມາ 34:34 | ແອລະມາ 40:11—14 | ປັນຍາຈານ 12:7 |

ໝາຍເຫດ

## ຄວາມເປັນຄືນມາຈາກຕາຍ, ການພິພາກສາ, ແລະ ຄວາມເປັນອຳມະຕະ

ເມື່ອຮ່າງກາຍ ແລະ ວິນຍານຂອງເຮົາໄດ້ເຂົ້າຄືນຫາກັນໃໝ່ຜ່ານຄວາມເປັນຄືນມາຈາກຕາຍ, ເຮົາຈະຖືກນຳໄປສູ່ທີ່ປະທັບຂອງພະເຈົ້າ ເພື່ອຮັບການພິພາກສາ. ເຮົາຈະຈື່ໄດ້ທຸກຢ່າງເຖິງຄວາມຊອບທຳ ແລະ ຄວາມຜິດຂອງເຮົາ. ຖ້າເຮົາໄດ້ກັບໃຈແລ້ວ, ເຮົາຈະໄດ້ຮັບຄວາມເມດຕາ. ເຮົາຈະໄດ້ຮັບລາງວັນຕາມວຽກງານ ແລະ ຄວາມປາດຖະໜາຂອງເຮົາ.

ຜ່ານຄວາມເປັນຄືນມາຈາກຕາຍ ທຸກໆຄົນຈະເປັນອຳມະຕະ—ໝາຍຄວາມວ່າ ເຂົາເຈົ້າຈະມີຊີວິດຕະຫລອດໄປ. ຄວາມເປັນອຳມະຕະແມ່ນຂອງປະທານທີ່ມອບໃຫ້ຄົນທັງໝົດລ້າໆ, ບໍ່ວ່າເຂົາຈະຊອບທຳ ຫລື ຊົ່ວຊ້າກໍຕາມ. ແຕ່ວ່າ, ຊີວິດນິລັນດອນບໍ່ຄືກັນກັບຄວາມເປັນອຳມະຕະ. ຊີວິດນິລັນດອນເປັນຂອງປະທານຂອງພະເຈົ້າທີ່ມອບໃຫ້ແກ່ຄົນທີ່ເຊື່ອຟັງພະອົງເທົ່ານັ້ນ. ມັນເປັນສະພາບອັນສູງສຸດທີ່ເຮົາສາມາດໄດ້ຮັບ. ຊີວິດນິລັນດອນເປັນຂອງຄົນຜູ້ທີ່ໝົດບາບ ແລະ ໝົດທຸກໂດຍຜ່ານການຊົດໃຊ້ຂອງພະຄິດ. ມັນແມ່ນຄວາມສູງສົ່ງ, ເຊິ່ງໝາຍຄວາມວ່າເປັນການໄດ້ຢູ່ກັບພະເຈົ້າຕະຫລອດໄປເປັນຄອບຄົວນິລັນດອນ. ເພື່ອຈະໄດ້ຮູ້ຈັກພະເຈົ້າ ແລະ ພະເຢຊູຄິດ ແລະ ມີປະສົບການຊີວິດທີ່ສອງພະອົງຊື່ນຊົມ.

### ຄວາມເປັນຄືນມາຈາກຕາຍ ແລະ ການກັບມາເກີດອີກ

ບາງຄົນອາດຈະສັບສົນກ່ຽວກັບຄຳສອນເລື່ອງຄວາມເປັນມາຈາກຕາຍກັບແນວຄິດກ່ຽວກັບການກັບມາເກີດອີກ. ແນວຄິດກ່ຽວກັບການກັບມາເກີດອີກກ່ຽວພັນເຖິງການເກີດມາໃນໂລກອີກໃນຮູບແບບອື່ນ ແລະ ແມ່ນຄຳສອນທີ່ຜິດ. ຄຳສອນກ່ຽວກັບຄວາມເປັນຄືນມາຈາກຕາຍກ່ຽວພັນເຖິງການໄດ້ຮັບຂອງປະທານນິລັນດອນ ຂອງການມີຮ່າງກາຍອຳມະຕະທີ່ມີເນື້ອໜັງ ແລະ ກະດູກ. ນີ້ແມ່ນຄຳສອນທີ່ແທ້ຈິງ. ໃຫ້ແນ່ໃຈວ່າຄົນທີ່ທ່ານສອນເຂົ້າໃຈຢ່າງແຈ່ມແຈ້ງເຖິງຄຳສອນກ່ຽວກັບຄວາມເປັນຄືນມາຈາກຕາຍ.

## ອານາຈັກແຫ່ງລັດສະໝີພາບ

ໃນລະຫວ່າງມີຊີວິດໃນໂລກມະນຸດ, ເຮົາໄດ້ເລືອກກ່ຽວກັບຄວາມດີ ແລະ ຄວາມຊົ່ວ. ພະເຈົ້າໃຫ້ລາງວັນເຮົາຕາມວຽກງານ ແລະ ຄວາມປາດຖະໜາຂອງເຮົາ. ເພາະວ່າພະເຈົ້າໃຫ້ລາງວັນແກ່ເຮົາທຸກຄົນຕາມສິ່ງທີ່ເຮົາເຮັດຢູ່ໃນໂລກນີ້, ຈະມີອານາຈັກແຕກຕ່າງກັນໃນລັດສະໝີພາບ ເຊິ່ງເຮົາຈະຖືກສົ່ງໄປຫາຫລັງຈາກການພິພາກສາ. ຜູ້ໃດທີ່ໄດ້ກັບໃຈຈາກບາບ ແລະ ໄດ້ຮັບພິທີການທັງຫລາຍຂອງພະກິດຕິຄຸນ ແລະ ຮັກສາພະບັນຍັດທີ່ກ່ຽວຂ້ອງກັນນີ້ ຈະຖືກຊຳລະໂດຍການຊົດໃຊ້ຂອງພະຄິດ. ເຂົາເຈົ້າຈະໄດ້ຮັບຄວາມສູງສົ່ງໃນອານາຈັກສູງສຸດ, ເຊິ່ງເອີ້ນອີກຢ່າງໜຶ່ງວ່າ ອານາຈັກຊັ້ນສູງ. ເຂົາເຈົ້າຈະຢູ່ໃນທີ່ປະທັບຂອງພະເຈົ້າ, ຈະກາຍເປັນເໝືອນດັ່ງພະອົງ, ແລະ ຈະໄດ້ຮັບຄວາມປິຕິຍິນດີທີ່ສົມບູນ. ເຂົາເຈົ້າຈະຢູ່ຮ່ວມກັນຊົ່ວນິລັນດອນກັບຄອບຄົວຂອງເຂົາເຈົ້າຜູ້ທີ່ມີຄ່າຄວນ. ໃນພະຄຳພີ, ອານາຈັກນີ້ແມ່ນປຽບທຽບໃສ່ກັບລັດສະໝີພາບ ຫລື ແສງສະຫວ່າງຂອງດວງຕາເວັນ.

ຄົນທີ່ບໍ່ຍອມຮັບພະກິດຕິຄຸນຂອງພະເຢຊູຄິດຢ່າງສົມບູນ ແຕ່ດຳລົງຊີວິດຢ່າງມີກຽດ ຈະໄດ້ຢູ່ໃນອານາຈັກຊັ້ນກາງ. ອານາຈັກນີ້ເທົ່າກັນກັບລັດສະໝີພາບຂອງດວງຈັນ.

ຄົນທີ່ມີຊີວິດໃນບາບ ແລະ ບໍ່ກັບໃຈໃນຊີວິດນີ້ ຈະໄດ້ຮັບລາງວັນໃນອານາຈັກຕ່ຳສຸດ, ເຊິ່ງເອີ້ນວ່າ ອານາຈັກຊັ້ນຕ່ຳ. ອານາຈັກນີ້ເທົ່າກັນກັບລັດສະໝີພາບຂອງດາວ.

### ການສຶກສາພະຄຳພີ

**ຄວາມເປັນຄືນມາຈາກຕາຍ ແລະ ການຟື້ນຟູ**

| | | |
|---|---|---|
| 2 ນີໄຟ 9:14–15 | Jacob 6:8–9 | ແອລະມາ 42:13–15, 22–23 |

ໝາຍເຫດ

### ການພິພາກສາ

2 Nephi 28:23 | ແອລະມາ 5:15–21 | D&C 132:12; 137:9
ໂມໄຊຢາ 3:23–25 | ແອລະມາ 12:12–14 | ໂຢຮັນ 5:22

### ອານາຈັກແຫ່ງລັດສະໝີພາບ

3 ນີໄຟ 28:10 | D&C 76 | ມັດທາຍ 5:48
D&C 76: Introduction | D&C 137 | 1 ໂກລິນໂທ 15:40–42

### ຊີວິດນິລັນດອນ

2 ນີໄຟ 31:17–21 | D&C 45:8 | ໂຢຮັນ 3:16
D&C 14:7 | D&C 93:19 | ໂຢຮັນ 17:3
D&C 29:43–44

## ແຜນແຫ່ງຄວາມລອດ




ການຊົດໃຊ້ຂອງພະເຢຊູຄຣິດເຮັດໃຫ້ຄວາມລອດເປັນໄປໄດ້.

## ການເຊື້ອເຊີນໃຫ້ຮັບບັບຕິດສະມາ

ການເຊື້ອເຊີນໃຫ້ຮັບບັບຕິດສະມາ ແລະ ຮັບການຢືນຢັນ ຄວນຈະແຈ່ມແຈ້ງ ແລະ ໂດຍກົງ: "ທ່ານຈະເຮັດຕາມຕົວຢ່າງຂອງພະເຢຊູຄຣິດ ໂດຍການຮັບບັບຕິດສະມາຈາກຄົນຜູ້ໜຶ່ງທີ່ມີອຳນາດຖານະປະໂລຫິດຂອງພະເຈົ້າບໍ? ເຮົາຈະມີພິທີບັບຕິດສະມາໃນ (ວັນທີ). ທ່ານຈະຕຽມຕົວເພື່ອຮັບບັບຕິດສະມາໃນວັນນັ້ນບໍ?"

## ແນວຄິດສຳລັບການສອນ

ພາກນີ້ຈະໃຫ້ແນວຄິດແກ່ທ່ານເພື່ອໃຊ້ໃນການຕຽມ ແລະ ສອນບົດຮຽນນີ້. ຈົ່ງອະທິຖານ ແລະ ເຮັດຕາມພະວິນຍານເມື່ອທ່ານຕັດສິນໃຈນຳໃຊ້ແນວຄິດເຫລົ່ານີ້. ໃຫ້ເພີ່ມແນວຄິດທີ່ທ່ານເລືອກໃສ່ ໃນແຜນບົດຮຽນຂອງທ່ານ. ຈົ່ງເຂົ້າໃຈວ່າ ແນວຄິດເຫລົ່ານີ້ເປັນພຽງຂໍ້ແນະນຳເທົ່ານັ້ນ ເພື່ອຊ່ອຍທ່ານໃຫ້ສະໜອງຄວາມຕ້ອງການຂອງຄົນທີ່ທ່ານສອນ, ແຕ່ບໍ່ແມ່ນເງື່ອນໄຂທີ່ຈຳເປັນ.

### ແຜນບົດຮຽນສັ້ນ (3–5 ນາທີ)

ແຜນແຫ່ງຄວາມລອດສອນເຮົາວ່າ ເຮົາມາຈາກໃສ, ເປັນຫຍັງເຮົາຈຶ່ງຢູ່ໃນໂລກ, ແລະ ເຮົາຈະໄປໃສຫລັງຈາກ ຊີວິດນີ້. ມັນໄດ້ຈັດການເດີນທາງນິລັນດອນໄວ້ໃຫ້ເຮົາໂດຍຜ່ານກ່ອນຊີວິດມະຕະ, ຊີວິດມະຕະ, ຄວາມຕາຍ, ຄວາມເປັນຄືນມາຈາກຕາຍ, ແລະ ເຖິງຊີວິດໃນຊົ່ວນິລັນດອນຂອງເຮົາ. ແຜນນີ້ຍັງໄດ້ອະທິບາຍເຖິງສິ່ງທີ່ພະບິດາຜູ້ສະຖິດໃນສະຫວັນທີ່ຮັກຂອງເຮົາໄດ້ກະທຳເພື່ອຊ່ອຍໃຫ້ການເດີນທາງຂອງເຮົາບັນລຸຜົນສຳເລັດເພື່ອວ່າເຮົາຈະສາມາດກັບຄືນໄປສູ່ທີ່ປະທັບຂອງພະອົງ ແລະ ເປັນເໝືອນດັ່ງພະອົງ. ແຜນແຫ່ງຄວາມລອດເນັ້ນໜັກເຖິງພາລະກິດ ແລະ ການຊົດໃຊ້ຂອງພະເຢຊູຄິດທີ່ເອົາຊະນະຜົນສະທ້ອນຂອງການຕົກ ແລະ ເຮັດໃຫ້ຊີວິດນິລັນດອນເປັນໄປໄດ້ສຳລັບເຮົາ. ພວກເຮົາຂໍເຊື້ອເຊີນໃຫ້ທ່ານຈົ່ງພິຈາລະນາ ແລະ ອະທິຖານກ່ຽວກັບຂ່າວສານນີ້.

- ຊີວິດກ່ອນເກີດ: ຈຸດປະສົງ ແລະ ແຜນຂອງພະເຈົ້າສຳລັບເຮົາ
- ການສ້າງ
- ສິດທິ ແລະ ການຕົກຂອງ ອາດາມ ແລະ ເອວາ
- ຊີວິດເຮົາໃນໂລກ
- ການຊົດໃຊ້
- ໂລກວິນຍານ
- ຄວາມເປັນຄືນມາຈາກຕາຍ, ການພິພາກສາ, ແລະ ຄວາມເປັນອະມະຕະ
- ອານາຈັກແຫ່ງລັດສະໝີພາບ

#### ຄຳໝັ້ນສັນຍາ

- ທ່ານຈະອະທິຖານເພື່ອໃຫ້ຮູ້ວ່າສິ່ງທີ່ພວກເຮົາສອນເປັນຄວາມຈິງບໍ?
- ທ່ານຈະກັບໃຈຈາກບາບຂອງທ່ານບໍ?
- ທ່ານຈະໄປໂບດນຳພວກເຮົາບໍ່ວັນອາທິດນີ້?
- ທ່ານຈະເຮັດຕາມຕົວຢ່າງຂອງພະຜູ້ຊ່ອຍໃຫ້ລອດ ແລະ ຮັບບັບຕິດສະມາໃນ (ວັນທີ) ບໍ?
- ພວກເຮົາຂໍນັດເວລາມາຢ້ຽມຢາມເທື່ອໜ້າໄດ້ບໍ?
- ພະບັນຍັດຈາກບົດຮຽນທີ 4 ທີ່ທ່ານເລືອກເອົາມາຮ່ວມ.

ໝາຍເຫດ

**ບົດຮຽນທີ 2:**
**ແຜນແຫ່ງຄວາມລອດ**

ໝາຍເຫດ

## ແຜນບົດຮຽນຍາວປານກາງ (10–15 ນາທີ)

ຂ່າວສານຂອງພວກເຮົາຊ່ອຍໃຫ້ເຮົາເຂົ້າໃຈເປົ້າໝາຍຂອງຊີວິດ ແລະ ເຮົາແມ່ນໃຜ. ມັນໃຫ້ຄວາມຫວັງແກ່ເຮົາ ແລະ ຊ່ອຍໃຫ້ເຮົາພົບຄວາມສະຫງົບ, ຄວາມປິຕິຍິນດີ, ແລະ ຄວາມສຸກ. ຂ່າວສານນີ້ບອກເຮົາວ່າເຮົາມາຈາກໃສ, ເປັນຫຍັງເຮົາຈຶ່ງຢູ່ໃນໂລກນີ້, ແລະ ເຮົາຈະໄປໃສຫລັງຈາກຊີວິດນີ້. ພະເຈົ້າເປັນພະບິດາຂອງເຮົາ, ແລະ ພະອົງຮັກເຮົາ. ເຮົາເປັນລູກຂອງພະອົງ. ເຮົາເປັນພາກສ່ວນຂອງຄອບຄົວພະອົງ, ແລະ ເຮົາໄດ້ຢູ່ກັບພະອົງກ່ອນທີ່ເຮົາມາເກີດໃນໂລກນີ້. ພະອົງມີແຜນແຫ່ງຄວາມສຸກທີ່ຈະເຮັດໃຫ້ເຮົາສາມາດກັບຄືນສູ່ທີ່ປະທັບຂອງພະອົງຫລັງຈາກຊີວິດນີ້. ການເຕີບໂຕຂອງເຮົາຂຶ້ນຢູ່ກັບການໃຊ້ສິດທິທີ່ພະເຈົ້າໄດ້ມອບໃຫ້ເຮົາ, ຫລື ຄວາມສາມາດທີ່ຈະເລືອກ. ຕາມແຜນນັ້ນ, ການຕົກຂອງ ອາດາມ ເຮັດໃຫ້ເຮົາສາມາດມາຢູ່ໃນໂລກ, ຮັບເອົາຮ່າງກາຍ, ມີປະສົບການ, ແລະ ມີຄອບຄົວຂອງເຮົາເອງ. ແຕ່ວ່າການຕົກໄດ້ເຮັດໃຫ້ມີການຕາຍທາງຮ່າງກາຍ, ເຊິ່ງແມ່ນການແຍກຂອງວິນຍານຈາກຮ່າງກາຍ, ພ້ອມກັບການຕາຍທາງວິນຍານ, ເຊິ່ງແມ່ນການແຍກຈາກພະເຈົ້າ.

ພະເຢຊູຄຶດເປັນສູນກາງຂອງແຜນຂອງພະເຈົ້າ. ການເສຍສະລະຊົດໃຊ້ຂອງພະຄຶດໄດ້ເອົາຊະນະຜົນສະທ້ອນຈາກການຕາຍທາງຮ່າງກາຍ ແລະ ທາງວິນຍານ. ເຮົາທຸກຄົນຈະຄືນມາຈາກຕາຍ ແລະ ຈະມີຊີວິດຢູ່ດ້ວຍມີຮ່າງກາຍທີ່ເປັນອິດສະລະຈາກຄວາມເຈັບປວດ ແລະ ພະຍາດ. ພະຄຶດຍັງໄດ້ເຮັດໃຫ້ເຮົາສາມາດເອົາຊະນະຄວາມຕາຍທາງວິນຍານນຳອີກ. ເມື່ອເຮົາດຳລົງຊີວິດຕາມພະກິດຕິຄຸນຂອງພະອົງ, ພະອົງຈະອະໄພບາບໃຫ້ເຮົາດ້ວຍຄວາມເມດຕາຂອງພະອົງ. ພະອົງຈະປິ່ນປົວເຮົາ ແລະ ປ່ຽນຄວາມຮູ້ສຶກຜິດ ແລະ ລະອາຍໃຈເປັນຄວາມສະຫງົບ ແລະ ຄວາມສຸກໃນຊີວິດນີ້.

ໃນການເປັນສ່ວນໜຶ່ງໃນແຜນແຫ່ງຄວາມເມດຕາຂອງພະເຈົ້າ, ເຮົາທຸກຄົນຈະປະເຊີນກັບການຕາຍທາງຮ່າງກາຍ. ວິນຍານຂອງເຮົາຈະແຍກອອກຈາກຮ່າງກາຍ ແລະ ຈະໄປຢູ່ໃນໂລກວິນຍານຊົ່ວລະຍະໜຶ່ງ. ຫລັງຈາກນັ້ນເຮົາຈະເປັນຄືນມາຈາກຄວາມຕາຍໂດຍມີຮ່າງກາຍທີ່ເປັນອຳມະຕະ ເຊິ່ງແມ່ນການຮ່ວມກັນນິລັນດອນຂອງຮ່າງກາຍ ແລະ ວິນຍານ. ເຮົາຈະຖືກພິພາກສາຕາມວຽກງານ ແລະ ຄວາມປາດຖະໜາຂອງເຮົາ. ຜູ້ທີ່ດຳລົງຊີວິດໃນພະກິດຕິຄຸນຈະໄດ້ຮັບຂອງປະທານອັນຍິ່ງໃຫຍ່ທີ່ສຸດ ຈາກພະບິດາຜູ້ສະຖິດໃນສະຫວັນຂອງເຮົາ, ນັ້ນຄືຂອງປະທານແຫ່ງຊີວິດນິລັນດອນໃນທີ່ປະທັບຂອງພະອົງ.

ພະບິດາເທິງສະຫວັນຂອງເຮົາໄດ້ຕິດຕໍ່ກັບລູກໆຂອງພະອົງດ້ວຍຄວາມຮັກອີກຄັ້ງໜຶ່ງ ເພື່ອເປີດເຜີຍແຜນແຫ່ງຄວາມສຸກ. ເຮົາຮຽນຮູ້ກ່ຽວກັບແຜນທີ່ດີເລີດນີ້ໃນພະຄຳພີມໍມອນ ເຊິ່ງທ່ານສາມາດອ່ານ, ພິຈາລະນາ, ແລະ ອະທິຖານກ່ຽວກັບແຜນນີ້ໄດ້. ພວກເຮົາຂໍເຊື້ອເຊີນທ່ານໃຫ້ໄປໂບດ ແລະ ນະມັດສະການນຳພວກເຮົາ.

ໝາຍເຫດ

### ຄຳໝັ້ນສັນຍາ

- ທ່ານຈະອະທິຖານເພື່ອໃຫ້ຮູ້ວ່າສິ່ງທີ່ພວກເຮົາສອນເປັນຄວາມຈິງບໍ?
- ທ່ານຈະກັບໃຈຈາກບາບຂອງທ່ານບໍ?
- ທ່ານຈະໄປໂບດນຳພວກເຮົາບໍ່ວັນອາທິດນີ້?
- ທ່ານຈະເຮັດຕາມຕົວຢ່າງຂອງພະຜູ້ຊ່ອຍໃຫ້ລອດ ແລະ ຮັບບັບຕິດສະມາໃນ (ວັນທີ) ບໍ?
- ພວກເຮົາຂໍນັດເວລາມາຢ້ຽມຢາມເທື່ອໜ້າໄດ້ບໍ?
- ພະບັນຍັດຈາກບົດຮຽນທີ 4 ທີ່ທ່ານເລືອກເອົາມາຮ່ວມ.

### ແຜນບົດຮຽນທັງໝົດ (30–45 ນາທີ)

- ຊີວິດກ່ອນເກີດ: ຈຸດປະສົງ ແລະ ແຜນຂອງພະເຈົ້າສຳລັບເຮົາ
  - ພະເຈົ້າເປັນພະບິດາເທິງສະຫວັນຂອງເຮົາ, ແລະ ເຮົາເປັນລູກຂອງພະອົງ (ເບິ່ງ ກິດຈະການ 17:16–34; ເຮັບເລີ 12:9).
  - ພະເຈົ້າມີແຜນສຳລັບຄວາມສຸກຂອງເຮົາ. ພະເຢຊູຄິດເປັນສູນກາງຂອງແຜນນັ້ນ.
  - ແຜນແຫ່ງຄວາມສຸກຂອງພະເຈົ້າເຮັດໃຫ້ການກັບຄືນໄປສູ່ທີ່ປະທັບຂອງພະອົງເປັນໄປໄດ້ (see Moses 1:39).
  - ການເຕີບໂຕນິລັນດອນຂອງເຮົາຂຶ້ນຢູ່ກັບວິທີທີ່ເຮົາໃຊ້ສິດທິຂອງເຮົາ. (ເບິ່ງ 2 ນີໄຟ 2:27–29).
- ການສ້າງ
  - ພາຍໃຕ້ການນຳທາງຂອງພະບິດາ, ພະເຢຊູຄິດໄດ້ສ້າງໂລກຂຶ້ນ. (ເບິ່ງ ເຮັບເລີ 1:1–3).
- ສິດທິ ແລະ ການຕົກຂອງ ອາດາມ ແລະ ເອວາ
  - ອາດາມ ແລະ ເອວາ ໄດ້ຖືກສ້າງຂຶ້ນຕາມຮູບຮ່າງລັກສະນະຂອງພະເຈົ້າ (ເບິ່ງ ປະຖົມມະການ 1:26–27).
  - ໃນສວນເອເດນເຂົາເຈົ້າບໍລິສຸດ ແລະ ຢູ່ໃນທີ່ປະທັບຂອງພະເຈົ້າ.
  - ເພາະເຂົາເຈົ້າໄດ້ກິນໝາກໄມ້ທີ່ຕ້ອງຫ້າມ, ເຂົາເຈົ້າຈຶ່ງໄດ້ຖືກໄລ່ອອກຈາກສວນ (see Moses 4:19–31). ນີ້ເອີ້ນວ່າ ການຕົກ.
  - ເຂົາເຈົ້າໄດ້ກາຍເປັນຄົນມະຕະ, ສາມາດມີລູກໄດ້, ແລະ ຕ້ອງປະສົບກັບບາບ ແລະ ຄວາມຕາຍ (ເບິ່ງ 2 ນີໄຟ 2:22–25; Moses 5:11).

## ບົດຮຽນທີ 2:
## ແຜນແຫ່ງຄວາມລອດ

ໝາຍເຫດ

- ຊີວິດເຮົາໃນໂລກ
  - ຈຸດປະສົງໃນຊີວິດຂອງເຮົາແມ່ນ ຊອກຫາຄວາມສະຫງົບ, ຄວາມຊື່ນຊົມ, ແລະ ຄວາມສຸກເປັນຄອບຄົວ ແລະ ເພື່ອຕຽມພ້ອມທີ່ຈະກັບຄືນໄປຢູ່ກັບພະເຈົ້າ.
  - ເຮົາມາຢູ່ໃນໂລກເພື່ອຮັບການທົດສອບ (see Abraham 3:24–25).
  - ເຮົາໄດ້ຮັບຮ່າງກາຍທີ່ມີເນື້ອໜັງ ແລະ ກະດູກ, ແຕ່ເຮົາຕ້ອງປະສົບກັບການຕາຍທາງຮ່າງກາຍ.
  - ພະອົງໄດ້ມອບພະບັນຍັດໃຫ້ເຮົາ. ຖ້າເຮົາເຊື່ອຟັງ, ເຮົາຈະໄດ້ຮັບພອນ. ຖ້າເຮົາບໍ່ເຊື່ອຟັງ, ເຮົາໄດ້ເຮັດບາບ ແລະ ໄດ້ຮັບຜົນທີ່ຕາມມານັ້ນ.
  - ຕ້ອງໄດ້ຈ່າຍຄ່າບາບທັງໝົດ, ບໍ່ວ່າຈະເປັນໂດຍຕົວເຮົາເອງ ຫລື ໂດຍພະຄຶດ (see D&C 19:15–20).
  - ເຮົາເຮັດການເລືອກ, ແລະ ເຮົາທຸກຄົນໄດ້ເຮັດບາບ (ເບິ່ງ ໂລມ 3:23).
  - ເຮົາມີປະສົບການທີ່ນຳຄວາມສຸກ ແລະ ຄວາມໂສກເສົ້າມາສູ່ເຮົາຄືກັນ.
  - ເຮົາບໍ່ສາມາດເອົາຊະນະຄວາມຕາຍທາງຮ່າງກາຍ ຫລື ທາງວິນຍານໄດ້ປາດສະຈາກພະຄຶດ.
- ການຊົດໃຊ້
  - ເພາະພະເຢຊູຄຶດໄດ້ເອົາຊະນະຄວາມຕາຍທາງຮ່າງກາຍ, ເຮົາທຸກຄົນຈະໄດ້ເປັນຄືນມາຈາກຕາຍ (ເບິ່ງ ແອລະມາ 11:41–43).
  - ຜ່ານການຊົດໃຊ້ຂອງພະຄຶດ ເຮົາສາມາດສະອາດຈາກບາບ ເພື່ອວ່າເຮົາຈະສາມາດກັບຄືນໄປຢູ່ໃນທີ່ປະທັບຂອງພະເຈົ້າ (ເບິ່ງ 2 ນີໄຟ 9:8–9).
  - ພະຄຶດຈະໃຫ້ອະໄພບາບຂອງເຮົາເມື່ອເຮົາມີສັດທາໃນພະອົງ, ກັບໃຈ, ຮັບບັບຕິດສະມາ ແລະ ຮັບເອົາຂອງປະທານແຫ່ງພະວິນຍານບໍລິສຸດ, ແລະ ອົດທົນຈົນເຖິງທີ່ສຸດ.
- ໂລກວິນຍານ
  - ທຸກໆຄົນຕ້ອງຕາຍ.
  - ເວລາຕາຍ ວິນຍານຂອງເຮົາຈະໄປສູ່ໂລກວິນຍານ.
  - ເຮົາຈະຢູ່ໃນສະພາບທຸກທໍລະມານ ຫລື ສະພາບສະຫງົບ ແລະ ສະບາຍໃຈ, ຂຶ້ນຢູ່ກັບເຮົາໄດ້ໃຊ້ຊີວິດຢູ່ໃນໂລກຢ່າງໃດ.
- ຄວາມເປັນຄືນມາຈາກຕາຍ, ການພິພາກສາ, ແລະ ຄວາມເປັນອຳມະຕະ
  - ວິນຍານ ແລະ ຮ່າງກາຍຂອງເຮົາຈະຮ່ວມກັນໃໝ່ໃນຄວາມເປັນຄືນມາຈາກຕາຍ (ເບິ່ງ ແອລະມາ 11:42–45; 40:23).

ໝາຍເຫດ

- ເຮົາຈະກັບຄືນໄປສູ່ທີ່ປະທັບຂອງພະເຈົ້າເພື່ອຮັບການພິພາກສາຕາມວຽກງານ ແລະ ຄວາມປາດຖະໜາຂອງເຮົາ.
- ຖ້າເຮົາໄດ້ກັບໃຈແລ້ວ, ເຮົາຈະໄດ້ຮັບຄວາມເມດຕາ.
- ຊີວິດນິລັນດອນເປັນຂອງປະທານຂອງພະເຈົ້າ ສຳລັບຜູ້ທີ່ເຊື່ອຟັງພະກິດຕິຄຸນຂອງພະເຢຊູຄິດທັງໝົດ (see D&C 14:7).

- ອານາຈັກແຫ່ງລັດສະໝີພາບ (see D&C 76; 137; 1 ໂກລິນໂທ 15:40–42).
  - ເຮົາຈະໄດ້ຮັບລາງວັນຕາມວຽກງານ ແລະ ຄວາມປາດຖະໜາຂອງເຮົາ (see D&C 137:9).
  - ຄົນທີ່ໄດ້ຮັບພະກິດຕິຄຸນ ແລະ ດຳລົງຊີວິດຢ່າງກ້າຫານຕະຫລອດຊີວິດຂອງເຂົາເຈົ້າຈະ ໄດ້ຮັບອານາຈັກຊັ້ນສູງ (see D&C 76:50–70).
  - ຄົນມີກຽດທີ່ "ຕາບອດໂດຍເລ່ຫລ່ຽມຂອງມະນຸດ" ແລະຜູ້ໃດທີ່ "ບໍ່ມີຄວາມກ້າຫານໃນປະຈັກພະຍານຂອງພະເຢຊູ[ຄິດ]" ຈະໄດ້ຮັບອານາຈັກຊັ້ນກາງ (see D&C 76:75, 79).
  - ຄົນທີ່ເຮັດບາບ ແລະ ບໍ່ກັບໃຈ ຈະໄດ້ຮັບອານາຈັກຊັ້ນຕ່ຳຫລັງຈາກເຂົາເຈົ້າໄດ້ຮັບຄວາມທຸກທໍລະມານ ແລະ ຈ່າຍຄ່າບາບຂອງເຂົາເຈົ້າ.

### ຄຳໝັ້ນສັນຍາ

- ທ່ານຈະອະທິຖານເພື່ອໃຫ້ຮູ້ວ່າສິ່ງທີ່ພວກເຮົາສອນເປັນຄວາມຈິງບໍ?
- ທ່ານຈະກັບໃຈຈາກບາບຂອງທ່ານບໍ?
- ທ່ານຈະໄປໂບດນຳພວກເຮົາບໍ່ວັນອາທິດນີ້?
- ທ່ານຈະເຮັດຕາມຕົວຢ່າງຂອງພະຜູ້ຊ່ອຍໃຫ້ລອດ ແລະ ຮັບບັບຕິດສະມາໃນ (ວັນທີ) ບໍ?
- ພວກເຮົາຈໍນັດເວລາມາຢ້ຽມຢາມເທື່ອໜ້າໄດ້ບໍ?
- ພະບັນຍັດຈາກບົດຮຽນທີ 4 ທີ່ທ່ານເລືອກເອົາມາຮ່ວມ.

## ຄຳຖາມທີ່ຕ້ອງຖາມຫລັງຈາກສອນແລ້ວ

- ທ່ານມີຄຳຖາມຫຍັງບໍ່ກ່ຽວກັບສິ່ງທີ່ພວກເຮົາສອນມາ?
- ທ່ານໄດ້ເຂົ້າໃຈຫຍັງແດ່ກ່ຽວກັບແຜນຂອງພະເຈົ້າສຳລັບທ່ານ ແລະ ຄອບຄົວຂອງທ່ານ?
- ຈາກສິ່ງທີ່ພວກເຮົາໄດ້ສອນທ່ານມາ, ທ່ານໄດ້ເຂົ້າໃຈຫຍັງແດ່ກ່ຽວກັບບົດບາດຂອງພະເຢຊູຄິດ? ນັ້ນມີຄວາມໝາຍແນວໃດສຳລັບທ່ານ?

ບົດຮຽນທີ 2:
ແຜນແຫ່ງຄວາມລອດ

ໝາຍເຫດ

## ການອະທິບາຍຄຳສັບທີ່ສຳຄັນ

ຕໍ່ໄປນີ້ແມ່ນຄຳສັບທີ່ເຂົ້າໃຈຍາກ. ໃຫ້ທ່ານອະທິບາຍຄຳສັບເຫລົ່ານີ້ໃຫ້ແຈ່ມແຈ້ງ ແລະ ໃຫ້ເບິ່ງວ່າ ຄົນທີ່ທ່ານສອນເຂົ້າໃຈຄຳສັບເຫລົ່ານີ້ດີ.

- **ການຊົດໃຊ້:** ຕາມທີ່ມີຢູ່ໃນພະຄຳພີ, ຊົດໃຊ້ໝາຍຄວາມວ່າ ການທົນທຸກຍ້ອນການກະທຳບາບ, ດ້ວຍວິທີນັ້ນຈຶ່ງມີການປົດປ່ອຍຜົນສະທ້ອນຂອງບາບຈາກຄົນທີ່ໄດ້ເຮັດບາບ ແລະ ປ່ອຍໃຫ້ເຂົາເຈົ້າປອງດອງ ກັບພະເຈົ້າ. ພະເຢຊູຄຣິດໄດ້ຮັບທຸກທໍລະມານໃນສວນເຄັດເຊມາເນ ແລະ ເທິງໄມ້ກາງແຂນ. ພະອົງເປັນອົງດຽວເທົ່ານັ້ນ ທີ່ສາມາດກະທຳການຊົດໃຊ້ອັນດີພ້ອມເພື່ອມະນຸດທັງປວງ. ພະອົງໄດ້ທົນທຸກເພື່ອບາບ ຂອງເຮົາຢູ່ໃນສວນເຄັດເຊມາເນ ແລະ ໄດ້ສິ້ນພະຊົນຢູ່ເທິງໄມ້ກາງແຂນ. ພະອົງຍອມຮັບເອົາການເຈັບປວດ, ພະຍາດ, ການລໍ້ລວງ, ຄວາມທຸກທໍລະມານ, ແລະ ຄວາມອ່ອນແອຂອງເຮົາທຸກໆຄົນ.
- **ຄວາມສູງສົ່ງ:** ເປັນຊີວິດນິລັນດອນໃນທີ່ປະທັບຂອງພະເຈົ້າ; ການເປັນເໝືອນດັ່ງພະບິດາຜູ້ສະຖິດໃນສະຫວັນຂອງເຮົາ ແລະ ຢູ່ໃນທີ່ປະທັບຂອງພະອົງ. ເປັນຂອງປະທານທີ່ຍິ່ງໃຫຍ່ທີ່ສຸດຂອງພະເຈົ້າທັງໝົດ. ຄວາມສູງສົ່ງເກີດຂຶ້ນຜ່ານການຊົດໃຊ້ຂອງພະຄຣິດ ແລະ ຜ່ານການເຊື່ອຟັງກົດ ແລະ ພິທີການທັງໝົດຂອງພະກິດຕິຄຸນ.
- **ການຕົກ (ຂອງ ອາດາມ ແລະ ເອວາ):** ເມື່ອ ອາດາມ ແລະ ເອວາ ໄດ້ກິນໝາກໄມ້ທີ່ຕ້ອງຫ້າມ, ເຂົາເຈົ້າໄດ້ກາຍເປັນຄົນມະຕະ—ໝາຍຄວາມວ່າ, ເຂົາເຈົ້າຈະຕ້ອງປະສົບກັບບາບ ແລະ ຄວາມຕາຍ. ອາດາມ ໄດ້ກາຍເປັນ "ມະນຸດຄົນທຳອິດ" ຢູ່ເທິງແຜ່ນດິນໂລກ (Moses 3:7). ການເປີດເຜີຍໃນຍຸກສຸດທ້າຍ ເຮັດໃຫ້ແຈ່ມແຈ້ງວ່າ ການຕົກເປັນພອນ ແລະ ວ່າເຮົາຄວນໃຫ້ກຽດແກ່ ອາດາມ ແລະ ເອວາ ໃນຖານະເປັນພໍ່ແມ່ຄູ່ທຳອິດຂອງມະນຸດທັງປວງ.
- **ການພິພາກສາ:** ພະເຈົ້າ, ຜ່ານພະເຢຊູຄຣິດ, ຈະພິພາກສາເຮົາແຕ່ລະຄົນ ເພື່ອຕັດສິນວ່າເຮົາຈະໄດ້ຮັບລັດສະໝີພາບແຫ່ງນິລັນດອນຂັ້ນໃດ. ການພິພາກສານີ້ຈະຂຶ້ນກັບການເຊື່ອຟັງພະບັນຍັດຂອງພະເຈົ້າ, ຮ່ວມດ້ວຍການຍອມຮັບເຖິງການເສຍສະລະຊົດໃຊ້ຂອງພະເຢຊູຄຣິດ. ເຮົາຈະໄດ້ຮັບລາງວັນນິລັນດອນຂອງເຮົາຕາມວຽກງານ ແລະ ຄວາມປາດຖະໜາທີ່ດີ ຫລື ຊົ່ວຂອງເຮົາ.
- **ຄວາມເປັນອຳມະຕະ:**
  ສະພາບມີຊີວິດຕະຫລອດໄປໃນລັກສະນະທີ່ໄດ້ເປັນຄືນມາຈາກຕາຍແລ້ວ, ບໍ່ຕ້ອງຮັບການຕາຍທາງຮ່າງກາຍອີກ.
- **ຄວາມເປັນມະຕະ:** ເວລາທີ່ເລີ້ມຈາກການເກີດເຖິງການຕາຍທາງຮ່າງກາຍ.
- **ການຕາຍທາງຮ່າງກາຍ:** ການແຍກຂອງວິນຍານຈາກຮ່າງກາຍຂອງເຮົາ, ເຊິ່ງວິນຍານຈະມີຊີວິດຢູ່ຕະຫລອດໄປ ແລະ ບໍ່ສາມາດຕາຍ.
- **ຊີວິດກ່ອນມະຕະ (ຄວາມເປັນກ່ອນມະຕະ; ຊີວິດກ່ອນເກີດໃນໂລກ):**
  ໃນຖານະເປັນລູກທາງວິນຍານ ຂອງພະບິດາຜູ້ສະຖິດໃນສະຫວັນຂອງເຮົາ, ເຮົາຢູ່ທີ່ປະທັບຂອງພະອົງກ່ອນເຮົາຈະມາເກີດໃນໂລກນີ້. ໃນຊີວິດກ່ອນມະຕະ ເຮົາບໍ່ມີຮ່າງກາຍ.
- **ການໄຖ່:** ຄືຊ່ອຍໃຫ້ລອດພົ້ນ, ຊື້, ຫລື ໄຖ່ຄ່າ, ດັ່ງເຊັ່ນປ່ອຍໃຫ້ບຸກຄົນໃດໜຶ່ງພົ້ນຈາກໜີ້ສິນໂດຍການຈ່າຍແທນ. ການໄຖ່ອ້າງເຖິງການຊົດໃຊ້ຂອງພະເຢຊູຄຣິດ ແລະ ການຊ່ອຍໃຫ້ລອດພົ້ນຈາກບາບ. ການຊົດໃຊ້ຂອງພະເຢຊູໄດ້ໄຖ່ມະນຸດທັງປວງຈາກການຕາຍທາງ

ໝາຍເຫດ

ຮ່າງກາຍ. ຜ່ານການຊົດໃຊ້ຂອງພະອົງ, ຄົນທີ່ມີສັດທາໃນພະອົງ ແລະ ກັບໃຈ ຈະໄດ້ຖືກໄຖ່ຈາກການຕາຍທາງວິນຍານຄືກັນ.

- **ຄວາມເປັນຄືນມາຈາກຕາຍ:** ການຮ່ວມກັນໃໝ່ຂອງວິນຍານກັບຮ່າງກາຍທີ່ມີເນື້ອໜັງ ແລະ ກະດູກ ຫລັງຈາກຄວາມຕາຍ. ຫລັງຈາກເປັນຄືນມາຈາກຕາຍ, ວິນຍານ ແລະ ຮ່າງກາຍຈະບໍ່ແຍກອອກຈາກກັນອີກ, ແລະ ຄົນນັ້ນເປັນຄົນອາມະຕະ. ທຸກໆຄົນທີ່ເກີດໃນໂລກຈະໄດ້ເປັນຄືນມາຈາກຕາຍ ເພາະວ່າພະເຢຊູຄຣິດໄດ້ເອົາຊະນະຄວາມຕາຍແລ້ວ.
- **ຄວາມລອດ:** ເພື່ອລອດຈາກການຕາຍທາງຮ່າງກາຍ ແລະ ທາງວິນຍານ. ທຸກໆຄົນຈະລອດຈາກການຕາຍທາງຮ່າງກາຍດ້ວຍພະຄຸນຂອງພະເຈົ້າ, ຜ່ານການສິ້ນພະຊົນ ແລະ ຄວາມເປັນຄືນມາຈາກຕາຍຂອງພະເຢຊູຄຣິດ. ແຕ່ລະຄົນສາມາດລອດຈາກການຕາຍທາງວິນຍານໄດ້ໂດຍພະຄຸນຂອງພະເຈົ້າ, ຜ່ານການມີສັດທາໃນພະເຢຊູຄຣິດ. ສັດທານີ້ໄດ້ຖືກສະແດງໃຫ້ເຫັນໃນຊີວິດຂອງການເຊື່ອຟັງກົດ ແລະ ເຮັດຕາມພິທີການທັງຫລາຍແຫ່ງພະກິດຕິຄຸນ ແລະ ຜ່ານການຮັບໃຊ້ຕໍ່ພະຄຣິດ.
- **ການຕາຍທາງວິນຍານ:** ການແຍກອອກພະເຈົ້າ ແລະ ອິດທິພົນຂອງພະອົງ; ການຕາຍກ່ຽວພັນເຖິງສິ່ງທີ່ຊອບທຳ. ການຕາຍທາງວິນຍານຍານໄດ້ມີຂຶ້ນໃນໂລກເພາະການຕົກຂອງ ອາດາມ (ເບິ່ງ ແອລະມາ 42:6–7). ຄົນທີ່ມີຄວາມຄິດ, ຄຳເວົ້າ, ແລະ ການກະທຳທີ່ຊົ່ວຊ້າ ເປັນຄົນທີ່ຕາຍທາງວິນຍານໃນຂະນະທີ່ມີ ຊີວິດຢູ່ໃນໂລກ (ເບິ່ງ 2 ນີໄຟ 9:39). ຜ່າຍການຊົດໃຊ້ຂອງພະເຢຊູຄຣິດ ແລະ ຜ່ານການເຊື່ອຟັງຫລັກທຳ ແລະ ພິທີການທັງຫລາຍຂອງພະກິດຕິຄຸນ, ມະນຸດຊາຍ ແລະ ຍິງ ຈະສາມາດຖືກຊຳລະຈາກບາບ ແລະ ເອົາຊະນະການຕາຍທາງວິນຍານໄດ້.

### ຄຳສັບອື່ນໆທີ່ທ່ານອາດຈະຕ້ອງແປຄວາມໝາຍເພີ່ມເຕີມສຳລັບຄົນທີ່ທ່ານສອນ

- ບັບຕິດສະມາໂດຍລົງໄປໃນນ້ຳໝົດທັງຕົວ
- ຊັ້ນສູງ
- ຖືກຊຳລະ [ຈາກບາບ]
- ການສ້າງ
- ການເຕີບໂຕຊົ່ວນິລັນດອນ
- ຊີວິດນິລັນດອນ
- ສັດທາ
- ໝາກໄມ້ທີ່ຕ້ອງຫ້າມ
- ຮັບອະໄພ [ຈາກບາບ]
- ສວນເອເດນ
- ອານາຈັກແຫ່ງລັດສະໝີພາບ
- ການກົງກັນຂ້າມ
- ການຕາຍທາງຮ່າງກາຍ
- ແຜນແຫ່ງຄວາມລອດ
- ການພິສູດ
- ກັບໃຈ
- ບາບ
- ໂລກວິນຍານ
- ຊັ້ນຕ່ຳ
- ຊັ້ນກາງ
- ຕົ້ນໄມ້ແຫ່ງຄວາມຮູ້ດີ ແລະ ຮູ້ຊົ່ວ

ໝາຍເຫດ

# ພະກິດຕິຄຸນຂອງພະເຢຊູຄຣິດ



## ເປົ້າໝາຍຂອງທ່ານ

ເມື່ອທ່ານສອນ, ຈົ່ງຕຽມຜູ້ສົນໃຈຂອງທ່ານໃຫ້ເຮັດຕາມຂໍ້ກຳນົດທີ່ບົ່ງໄວ້ສຳລັບການຮັບບັບຕິສະມາ ໃນ Doctrine and Covenants 20:37 ແລະ ໃນຄຳຖາມສຳລັບການສຳພາດກ່ອນບັບຕິສະມາ. ມັນຈະເປັນຜົນດີທີ່ສຸດຖ້າທ່ານເຊື້ອເຊີນຜູ້ສົນໃຈຂອງທ່ານໃຫ້ເຮັດ ແລະ ຮັກສາຄຳໝັ້ນສັນຍາທີ່ບົ່ງໄວ້ຂ້າງລຸ່ມນີ້.

### ຄຳຖາມສຳລັບການສຳພາດກ່ອນບັບຕິສະມາ

- ທ່ານເຊື່ອບໍ່ວ່າ ພະເຈົ້າເປັນພະບິດາຊົ່ວນິລັນດອນຂອງເຮົາ?
- ທ່ານເຊື່ອບໍ່ວ່າ ພະເຢຊູຄຣິດເປັນພະບຸດຂອງພະເຈົ້າ, ພະຜູ້ຊ່ອຍໃຫ້ລອດ ແລະ ພະຜູ້ໄຖ່ຂອງໂລກ?
- ທ່ານເຊື່ອບໍ່ວ່າ ສາດສະໜາຈັກ ແລະ ພະກິດຕິຄຸນຂອງພະເຢຊູຄຣິດໄດ້ຖືກຟື້ນຟູຄືນມາໃໝ່ຜ່ານສາດສະດາໂຢເຊັບ ສະມິດ?

### ຄຳໝັ້ນສັນຍາ

- ທ່ານຈະພັດທະນາສັດທາໃນພະເຢຊູຄຣິດໂດຍການຮຽນຮູ້ກ່ຽວກັບພະກິດຕິຄຸນຂອງພະອົງຕໍ່ໄປບໍ?
- ທ່ານຈະກັບໃຈ ແລະ ອະທິຖານເພື່ອຈະໄດ້ຮັບການໃຫ້ອະໄພຈາກບາບບໍ?
- ທ່ານຈະຮັບບັບຕິສະມາເພື່ອເປັນສະມາຊິກຂອງສາດສະໜາຈັກຂອງພະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍໃນ (ວັນທີ) ບໍ? ທ່ານຈະຮັບເອົາການຢືນຢັນ ແລະ ຮັບເອົາຂອງປະທານແຫ່ງພະວິນຍານບໍລິສຸດບໍ?
- ທ່ານຈະໄປໂບດນຳພວກເຮົາບໍ່ວັນອາທິດນີ້?
- ພວກເຮົາຂໍນັດເວລາມາຢ້ຽມຢາມເທື່ອໜ້າໄດ້ບໍ?
- ພະບັນຍັດຈາກບົດຮຽນທີ 4 ທີ່ທ່ານເລືອກເອົາມາຮ່ວມ.

## ຜ່ານພະຄຣິດ ເຮົາສາມາດຖືກຊຳລະຈາກບາບ

ພະເຈົ້າໄດ້ສົ່ງພະບຸດທີ່ຮັກຂອງພະອົງ, ພະເຢຊູຄຣິດ, ມາສູ່ໂລກເພື່ອວ່າລູກໆຂອງພະອົງທັງໝົດຈະມີໂອກາດທີ່ຈະກັບຄືນໄປສູ່ທີ່ປະທັບຂອງພະອົງຫລັງຈາກຕາຍ. ຜ່ານພະຄຸນ ແລະ ຄວາມເມດຕາຂອງພະຜູ້ຊ່ອຍໃຫ້ລອດເທົ່ານັ້ນ ເຮົາຈຶ່ງສາມາດຖືກຊຳລະຈາກບາບ ເພື່ອວ່າເຮົາຈະສາມາດຢູ່ໃນທີ່ປະທັບຂອງພະບິດາເທິງສະຫວັນ. ຖືກຊຳລະຈາກບາບຄື ການຖືກຮັກສາທາງວິນຍານ (ເບິ່ງ 3 ນີໄຟ 9.13; 18.32).

ໝາຍເຫດ

ເພາະການຊົດໃຊ້ ແລະ ການເປັນຄືນມາຈາກຕາຍຂອງພະຄຣິດ, ທຸກໆຄົນຈະຖືກນຳມາສູ່ທີ່ປະທັບຂອງພະຜູ້ເປັນເຈົ້າເພື່ອຈະໄດ້ຮັບການພິພາກສາຕາມວຽກງານ ແລະ ຄວາມປາດຖະໜາຂອງເຂົາ (ເບິ່ງ 2 ນີໄຟ 9.10–16; ຣິລາມັນ 14:15–18; 3 ນີໄຟ 27.14–22; D&C 137:9). ເຮົາຈະຖືກພິພາກສາຕາມກົດແຫ່ງຄວາມຍຸຕິທຳ ແລະ ເມດຕາ.

ຄວາມຍຸຕິທຳຄືກົດທີ່ບໍ່ປ່ຽນແປງ ເຊິ່ງນຳຜົນສະທ້ອນມາໃຫ້ຜູ້ກະທຳ—ນຳພອນມາໃຫ້ສຳລັບການເຊື່ອຟັງພະບັນຍັດຂອງພະເຈົ້າ ແລະ ນຳການລົງໂທດມາໃຫ້ສຳລັບການບໍ່ເຊື່ອຟັງ. ເຮົາທຸກຄົນເຮັດບາບ. ບາບເຮັດໃຫ້ເຮົາບໍ່ສະອາດ, ແລະ ບໍ່ມີສິ່ງໃດທີ່ບໍ່ສະອາດທີ່ສາມາດຢູ່ໃນທີ່ປະທັບຂອງພະເຈົ້າ (ເບິ່ງ 1 ນີໄຟ 10:21; 3 ນີໄຟ 27:19; Moses 6:57).

ພະຜູ້ຊ່ອຍໃຫ້ລອດພໍພະໄທກັບການຮຽກຮ້ອງຂອງຄວາມຍຸຕິທຳສຳລັບຜູ້ທີ່ກັບໃຈຈາກບາບຂອງເຂົາ ແລະ ພະຍາຍາມຮັກສາພະບັນຍັດທັງໝົດຂອງພະອົງ ເມື່ອພະອົງຢືນຢູ່ໃນບ່ອນແທນເຮົາ ແລະ ຖືກລົງໂທດດ້ວຍຄວາມທຸກທໍລະມານ ເພື່ອບາບຂອງເຮົາ. ການກະທຳນີ້ເອີ້ນວ່າ ການຊົດໃຊ້. ເພາະຄວາມບໍ່ເຫັນແກ່ຕົວຂອງພະອົງ, ພະຄຣິດຈຶ່ງສາມາດຮ້ອງຂໍກັບພະບິດາແທນເຮົາໄດ້. ພະບິດາເທິງສະຫວັນສາມາດໃຫ້ຄວາມເມດຕາ, ບໍ່ລົງໂທດເຮົາ, ແລະ ຕ້ອນຮັບເຮົາສູ່ທີ່ປະທັບຂອງພະອົງ. ພະບິດາເທິງສະຫວັນຂອງເຮົາໄດ້ສະແດງຄວາມເມດຕາເມື່ອພະອົງອະໄພບາບຂອງເຮົາ ແລະ ຊ່ອຍເຮົາໃຫ້ກັບຄືນໄປຢູ່ໃນທີ່ປະທັບຂອງພະອົງ.

ເຖິງຢ່າງໃດກໍຕາມ, ພະເຢຊູບໍ່ໄດ້ໃຫ້ເຮົາປະຖິ້ມໜ້າທີ່ຮັບຜິດຊອບສ່ວນຕົວຂອງເຮົາ. ພະອົງໃຫ້ອະໄພບາບຂອງເຮົາເມື່ອເຮົາຍອມຮັບພະອົງ, ກັບໃຈ, ແລະ ເຊື່ອຟັງພະບັນຍັດຂອງພະອົງ. ຜ່ານການຊົດໃຊ້ ແລະ ການດຳລົງຊີວິດໃນພະກິດຕິຄຸນ ເຮົາມີຄ່າຄວນທີ່ຈະເຂົ້າໄປສູ່ທີ່ປະທັບຂອງພະບິດາເທິງສະຫວັນຂອງເຮົາຢ່າງຖາວອນ. ເຮົາຕ້ອງສະແດງວ່າເຮົາຍອມຮັບພະຄຣິດ ແລະ ວ່າເຮົາມີສັດທາໃນພະອົງໂດຍການຮັກສາພະບັນຍັດຂອງພະອົງ ແລະ ເຊື່ອຟັງຫລັກທຳ ແລະ ພິທີການເບື້ອງຕົ້ນຂອງພະກິດຕິຄຸນ.

### ບາບ

ຄຳວ່າ "ບາບ" ມີຄວາມໝາຍຕ່າງກັນໃນວັດທະນະທຳທັງຫລາຍ. ໃນບາງວັດທະນະທຳ ບາບຄືການເຮັດບາງສິ່ງທີ່ກ່ຽວພັນກັບການເຮັດອາຊະຍາກຳ. ໃນບາງວັດທະນະທຳອື່ນອີກ ມັນຈະເປັນບາບພຽງແຕ່ຖ້າຖືກຈັບໄດ້ໃນການເຮັດບາງສິ່ງບາງຢ່າງຜິດ ແລະ ໄດ້ນຳຄວາມອັບອາຍມາສູ່ຄອບຄົວ ແລະ ຊຸມຊົນ. ຈົ່ງອະທິບາຍໃຫ້ແຈ່ມແຈ້ງວ່າ ບາບຄືການບໍ່ເຊື່ອຟັງພະບັນຍັດຂອງພະເຈົ້າ ແລະ ຜົນກໍຄືການແຍກຕົວອອກຈາກພະເຈົ້າ. ພະເຈົ້າຮູ້ທຸກສິ່ງທັງໝົດທີ່ເຮົາກະທຳ ແລະ ຄິດ, ແລະ ເຮົາເຮັດໃຫ້ພະອົງບໍ່ພໍໃຈເມື່ອເຮົາເຮັດບາບ. ຢ່າສົນທະນາກ່ຽວກັບການລ່ວງລະເມີດທີ່ຜ່ານມາຂອງທ່ານ. ຢ່າຊຸກຍູ້ ຫລື ຂໍໃຫ້ຜູ້ສົນໃຈສົນທະນາກ່ຽວກັບການລ່ວງລະເມີດຂອງເຂົາ.

### ການສຶກສາພະຄຳພີ

**ພະເຈົ້າໄດ້ສົ່ງພະບຸດຂອງພະອົງ**

ແອລະມາ 11:40 ໂຢຮັນ 3:16–17

**ຄວາມລອດຜ່ານພະຄຣິດ**

2 ນີໄຟ 2:6–8 ແອລະມາ 34:8–9, 14–16
2 ນີໄຟ 9:21–24

**ພະຄຣິດຄືຜູ້ວິງວອນແທນເຮົາ**

D&C 45:3–5

**ຄວາມເມດຕາ ແລະ ຄວາມຍຸຕິທຳ**

Mosiah 15:9 ແອລະມາ 42:22–25

ບົດຮຽນທີ 3:
ພະກິດຕິຄຸນຂອງພະເຢຊູຄິດ

ໝາຍເຫດ

## ສັດທາໃນພະເຢຊູຄິດ



ຫລັກທຳເບື່ອງຕົ້ນຂອງພະກິດຕິຄຸນຄືສັດທາໃນພະຜູ້ເປັນເຈົ້າພະເຢຊູຄິດ. ການມີສັດທາໃນພະຄິດຮ່ວມດ້ວຍການມີຄວາມເຊື່ອຢ່າງໝັ້ນຄົງວ່າພະອົງຄືພະບຸດອົງດຽວທີ່ໄດ້ຖືກຳເນີດຈາກພະເຈົ້າ ແລະ ເປັນພະຜູ້ຊ່ອຍໃຫ້ລອດ ແລະ ເປັນພະຜູ້ໄຖ່ຂອງໂລກ. ເຮົາຮູ້ວ່າເຮົາສາມາດກັບຄືນໄປຢູ່ກັບພະບິດາເທິງສະຫວັນໂດຍອາໄສພະຄຸນ ແລະ ຄວາມເມດຕາຂອງພະບຸດຂອງພະອົງ. ເມື່ອເຮົາມີສັດທາໃນພະຄິດ, ເຮົາຍອມຮັບ ແລະ ນຳໃຊ້ການຊົດໃຊ້ ແລະ ຄຳສອນຂອງພະອົງ. ເຮົາໄວ້ວາງໃຈພະອົງ ແລະ ສິ່ງທີ່ພະອົງກ່າວ. ເຮົາຮູ້ວ່າພະອົງມີອຳນາດທີ່ຈະຮັກສາຄຳສັນຍາຂອງພະອົງ. ພະບິດາເທິງສະຫວັນຈະໃຫ້ພອນຜູ້ທີ່ມີສັດທາ ແລະ ເຊື່ອຟັງພະບຸດຂອງພະອົງ.

ສັດທາໃນພະຄິດນຳໄປສູ່ການກະທຳ. ມັນນຳໄປສູ່ການກັບໃຈທີ່ແທ້ຈິງ ແລະ ຍາວນານ. ການມີສັດທາເຮັດໃຫ້ເຮົາພະຍາຍາມເທົ່າທີ່ເຮົາຈະສາມາດເຮັດໄດ້ ເພື່ອຮຽນຮູ້ກ່ຽວກັບພະຜູ້ຊ່ອຍໃຫ້ລອດຂອງເຮົາ ແລະ ເປັນເໝືອນດັ່ງພະອົງ. ເຮົາຢາກຮູ້ວ່າ ພະບັນຍັດຂອງພະອົງມີຫຍັງແດ່ ແລະ ເຮັດຕາມນັ້ນ. ເຖິງແມ່ນວ່າເຮົາຍັງຈະເຮັດຄວາມຜິດຢູ່, ແຕ່ເຮົາໄດ້ສະແດງຄວາມຮັກຂອງເຮົາຕໍ່ພະອົງໂດຍການພະຍາຍາມຮັກສາພະບັນຍັດຂອງພະອົງ ແລະ ຫລີກລ້ຽງຈາກການເຮັດບາບ.

ເຮົາເຊື່ອໃນພະຄິດ, ແລະ ເຮົາເຊື່ອວ່າພະອົງປາດຖະໜາໃຫ້ເຮົາຮັກສາພະບັນຍັດທັງໝົດຂອງພະອົງ. ເຮົາຕ້ອງການສະແດງສັດທາຂອງເຮົາໂດຍການເຊື່ອຟັງຕໍ່ພະອົງ. ເຮົາອະທິຖານດ້ວຍຄວາມເຊື່ອເພື່ອຈະມີພະລັງໃຫ້ເອົາຊະນະການລໍ້ລວງ. ເຮົາຍັງສາມາດພັດທະນາໃນຫລັກທຳພິເສດນຳອີກ, ດັ່ງເຊັ່ນ ພະວາຈາແຫ່ງປັນຍາ ຫລື ເງິນສ່ວນສິບ, ໂດຍຂັ້ນຕົ້ນມີຄວາມເຊື່ອທີ່ເຂັ້ມແຂງພໍໃນພະເຢຊູຄິດ ທີ່ຈະເຊື່ອຟັງພະບັນຍັດຂອງພະອົງ. ເມື່ອເຮົາຮັກສາພະບັນຍັດພິເສດນັ້ນ, ເຮົາຈະຮຽນຮູ້ຄວາມເປັນຈິງກ່ຽວກັບມັນໂດຍປະສົບການ (ເບິ່ງ ໂຢຮັນ 7:17). ເຮົາກໍເຕີບໂຕໃນສັດທາໄດ້ນຳອີກ ໂດຍການໄດ້ຍິນພະຄຳຂອງພະເຈົ້າ (ເບິ່ງ ໂລມ 10:17) ແລະ ໂດຍການອ່ານພະຄຳຂອງພະເຈົ້າ (ເບິ່ງ ຣີລາມັນ 15:7–8).

ເມື່ອເຮົາເຊື່ອຟັງພະເຈົ້າ, ພະອົງຈະໃຫ້ພອນແກ່ເຮົາ. ພະອົງໃຫ້ພະລັງແກ່ເຮົາ ເພື່ອຈະສາມາດປະເຊີນກັບການທ້າທາຍຂອງຊີວິດ. ພະອົງຊ່ອຍເຮົາໃຫ້ປ່ຽນຄວາມປາດຖະໜາຂອງຈິດໃຈເຮົາ. ຜ່ານສັດທາຂອງເຮົາໃນພະເຢຊູຄິດ, ພະອົງສາມາດຮັກສາເຮົາທາງຮ່າງກາຍ ແລະ ທາງວິນຍານ.

### ການສຶກສາພະຄຳພີ

**ສັດທາ, ອຳນາດ, ແລະ ຄວາມລອດ**

1 ນີໄຟ 7:12
ໂມໂລໄນ 10:7
ໂມໂລໄນ 7:33–34
2 Nephi 25:23
2 Nephi 9:23

**ຄຳສອນກ່ຽວກັບສັດທາ**

ແອລະມາ 32
Bible Dictionary, "Faith"
ເອເຟໂຊ 2:8

**ຕົວຢ່າງກ່ຽວກັບສັດທາ**

Ether 12
ເຮັບເລີ 11

**ການກະທຳ ແລະ ການເຊື່ອຟັງ**

1 ນີໄຟ 3:7
ຢາໂກໂບ 2:17–26
D&C 130:20–21

**ສັດທາຈົນເຖິງການກັບໃຈ**

ແອລະມາ 34

## ການກັບໃຈ

ຫລັກທຳທີສອງຂອງພະກິດຕິຄຸນຄື ການກັບໃຈ. ສັດທາຂອງເຮົາໃນພະຄຣິດ ແລະ ຄວາມຮັກຂອງເຮົາຕໍ່ພະອົງ ນຳເຮົາໃຫ້ກັບໃຈ, ຫລື ປ່ຽນຄວາມຄິດ, ຄວາມເຊື່ອ ແລະ ການປະພຶດຂອງເຮົາທີ່ບໍ່ສອດຄ່ອງກັບຄວາມປາດຖະໜາຂອງພະອົງ. ການກັບໃຈຮ່ວມດ້ວຍການສ້າງຄວາມເຂົ້າໃຈອັນໃໝ່ຕໍ່ພະເຈົ້າ, ຕໍ່ຕົວເອງ, ແລະ ຕໍ່ໂລກ. ເມື່ອເຮົາກັບໃຈ, ເຮົາຮູ້ສຶກເສຍໃຈເໝືອນດັ່ງພະເຈົ້າເສຍໃຈ, ຕໍ່ມາເຮົາຢຸດເຮັດສິ່ງທີ່ຜິດ ແລະ ເຮັດສິ່ງທີ່ຖືກຕ້ອງຕໍ່ໄປ. ການນຳຊີວິດຂອງເຮົາໃຫ້ເຮັດຕາມຄວາມປາດຖະໜາຂອງພະເຈົ້າຜ່ານການກັບໃຈຄືຈຸດປະສົງ ທີ່ເປັນສູນກາງຂອງຊີວິດເຮົາ. ເຮົາສາມາດກັບຄືນໄປຢູ່ກັບພະເຈົ້າອົງເປັນພະບິດາ ຜ່ານຄວາມເມດຕາຂອງ ພະຄຣິດເທົ່ານັ້ນ, ແລະ ເຮົາຈະໄດ້ຮັບຄວາມເມດຕາຂອງພະຄຣິດໂດຍເງື່ອນໄຂຂອງການກັບໃຈເທົ່ານັ້ນ.

ກ່ອນຈະກັບໃຈໄດ້ ເຮົາຕ້ອງຮູ້ເຖິງບາບຂອງເຮົາ ແລະ ຮູ້ສຶກສຳນຶກຜິດ, ຫລືຮູ້ສຶກເສຍໃຈເໝືອນດັ່ງພະເຈົ້າເສຍໃຈ. ເຮົາສາລະພາບບາບຂອງເຮົາຕໍ່ພະອົງ. ເຮົາຍັງສາລະພາບບາບທີ່ຮ້າຍແຮງຕໍ່ຜູ້ນຳຂອງສາດສະໜາຈັກທີ່ພະເຈົ້າໄດ້ມອບອຳນາດໃຫ້ນຳອີກ, ຜູ້ທີ່ສາມາດຊ່ອຍເຮົາໃຫ້ກັບໃຈ. ເຮົາອ້ອນວອນພະເຈົ້າໃນການອະທິຖານເພື່ອໃຫ້ພະອົງອະໄພໃຫ້ເຮົາ. ເຮົາຕ້ອງເຮັດທຸກຢ່າງທີ່ເຮົາສາມາດເຮັດໄດ້ ເພື່ອແກ້ໄຂບັນຫາທີ່ການກະທຳຜິດຂອງເຮົາເປັນຕົ້ນເຫດ. ນີ້ເອີ້ນວ່າ ການຕັ້ງຂຶ້ນໃໝ່. ເມື່ອເຮົາກັບໃຈ, ຄວາມຄິດເຫັນຂອງເຮົາກ່ຽວກັບຕົວເຮົາເອງ ແລະ ກ່ຽວກັບໂລກໄດ້ປ່ຽນໄປ. ເມື່ອເຮົາປ່ຽນ, ເຮົາຮູ້ວ່າເຮົາເປັນລູກຂອງພະເຈົ້າ ແລະ ເຮົາບໍ່ຈຳເປັນຕ້ອງເຮັດຄວາມຜິດແບບເກົ່າອີກຕໍ່ໄປ ເທື່ອແລ້ວເທື່ອອີກ. ຖ້າເຮົາກັບໃຈຢ່າງແທ້ຈິງ, ເຮົາໄດ້ຫັນໜີຈາກບາບຂອງເຮົາ ແລະ ບໍ່ເຮັດມັນອີກ. ເຮົາຈະຕໍ່ຕ້ານຄວາມປາດຖະໜາທີ່ຈະເຮັດບາບ. ຄວາມປາດຖະໜາທີ່ຈະເຮັດຕາມພະເຈົ້າ ຈະເຕີບໂຕຂຶ້ນ ແລະ ເລິກຊຶ້ງກວ່າເກົ່າ.

ການກັບໃຈຢ່າງແທ້ຈິງ ຈະນຳຜົນມາຫລາຍຢ່າງ. ເຮົາຈະຮູ້ສຶກເຖິງການໃຫ້ອະໄພຂອງພະເຈົ້າ ແລະ ເຖິງຄວາມສະຫງົບຂອງພະອົງໃນຊີວິດຂອງເຮົາ. ຄວາມຮູ້ສຶກຜິດ ແລະ ຄວາມເສຍໃຈຂອງເຮົາຈະຖືກປັດຫາຍໄປ. ເຮົາຈະຮູ້ສຶກເຖິງອິດທິພົນຂອງພະວິນຍານຢ່າງລົ້ນເຫລືອ. ແລະ ເມື່ອເຮົາຈາກຊີວິດນີ້ໄປ, ເຮົາຈະຕຽມພ້ອມຫລາຍກວ່າເກົ່າ ເພື່ອຢູ່ນຳພະບິດາເທິງສະຫວັນຂອງເຮົາ ແລະ ພະບຸດຂອງພະອົງ.

ຫລັງຈາກເຮົາໄດ້ຍອມຮັບພະຄຣິດ ແລະ ກັບໃຈຈາກບາບຂອງເຮົາແລ້ວ, ເຮົາອາດຈະຂາດຕົກບົກພ່ອງ ແລະ ເຮັດບາບອີກ. ເຮົາຄວນພະຍາຍາມແກ້ໄຂການລ່ວງລະເມີດເຫລົ່ານີ້ຕໍ່ໄປ. ນອກເໜືອຈາກນີ້ແລ້ວ, ເຮົາຄວນປັບປຸງ—ພັດທະນາຄຸນນະພາບໃຫ້ເໝືອນກັບພະຄຣິດຕໍ່ໄປ, ໃຫ້ເຕີບໂຕໃນຄວາມຮູ້, ແລະ ຮັບໃຊ້ໃຫ້ດີຫລາຍຂຶ້ນ. ເມື່ອເຮົາຮຽນຮູ້ຫລາຍຂຶ້ນກ່ຽວກັບສິ່ງທີ່ພະຜູ້ຊ່ອຍໃຫ້ລອດຄາດຫວັງຈາກເຮົາ, ເຮົາຈະຢາກສະແດງຄວາມຮັກຂອງເຮົາໂດຍການເຊື່ອຟັງພະອົງ. ເພາະສະນັ້ນ, ທຸກວັນເມື່ອເຮົາກັບໃຈ, ເຮົາຈະເຫັນວ່າຊີວິດຂອງເຮົາໄດ້ປ່ຽນແປງ ແລະ ດີຂຶ້ນ. ຫົວໃຈ ແລະ ການປະພຶດຂອງເຮົາຈະເປັນເໝືອນພະຄຣິດຫລາຍຂຶ້ນ. ເຮົາຈະໄດ້ຮູ້ສຶກເຖິງຄວາມສຸກອັນຍິ່ງໃຫຍ່ໃນການກັບໃຈທຸກວັນ.

### ການສຶກສາພະຄຳພີ

**ເຮົາທຸກຄົນເຮັດບາບ**

ໂລມ 3:23
1 ໂຢຮັນ 1:7–8

**ການໄຖ່ ແລະ ການໃຫ້ອະໄພ**

Helaman 5:10–11

**ການກັບໃຈ**

ແອລະມາ 34:8–17
2 ໂກລິນໂທ 7:9–10
D&C 58:42–43
Bible Dictionary, "Repentance"
D&C 61:2

**ຄວາມເມດຕາຍອມຮັບຜູ້ທີ່ສຳນຶກຜິດ**

ແອລະມາ 12:32–35
D&C 18:10–13
ແອລະມາ 42:13, 21–24

ໝາຍເຫດ

ໝາຍເຫດ

## ບັບຕິດສະມາ, ພັນທະສັນຍາຂໍ້ທຳອິດຂອງເຮົາ



ສັດທາໃນພະເຢຊູຄຣິດ ແລະ ການກັບໃຈ ຕຽມເຮົາເພື່ອຮັບບັບຕິດສະມາ ແລະ ການຢືນຢັນ. ພິທີການເປັນພິທີທີ່ສັກສິດ ຫລື ພິທີທາງສາດສະໜາທີ່ສະແດງວ່າເຮົາໄດ້ເຂົ້າຮ່ວມພັນທະສັນຍາກັບພະເຈົ້າ.

ພະເຈົ້າຕ້ອງການໃຫ້ລູກໆຂອງພະອົງເຮັດພັນທະສັນຍາຕັ້ງແຕ່ໃດມາ. ພັນທະສັນຍາຄືຂໍ້ຜູກມັດ ແລະ ການຕົກລົງທີ່ສັກສິດລະຫວ່າງພະເຈົ້າ ແລະ ມະນຸດ. ພະເຈົ້າສັນຍາວ່າ ຈະໃຫ້ພອນເຮົາ, ແລະ ເຮົາສັນຍາວ່າ ຈະເຊື່ອຟັງພະອົງ. ພະເຈົ້າໄດ້ຕັ້ງກົດພັນທະສັນຍາແຫ່ງພະກິດຕິຄຸນໄວ້, ເຊິ່ງເຮົາສາມາດຍອມຮັບ ຫລື ປະຕິເສດ. ການຮັກສາພັນທະສັນຍາຈະນຳພອນທັງຫລາຍມາໃຫ້ເຮົາໃນຊີວິດນີ້ ແລະ ນຳຄວາມສູງສົ່ງມາໃຫ້ເຮົາໃນຊີວິດທີ່ຈະມາເຖິງ.

ພັນທະສັນຍາເຮັດໃຫ້ເຮົາຢູ່ພາຍໃຕ້ຂໍ້ຜູກມັດທີ່ແໜ້ນໜາເພື່ອຈະຮັກສາຄຳໝັ້ນສັນຍາທີ່ເຮົາເຮັດໄວ້ນຳພະເຈົ້າ. ໃນການຮັກສາພັນທະສັນຍາຂອງເຮົາ, ເຮົາຕ້ອງຍົກເລີກກິດຈະກຳ ຫລື ຄວາມສົນໃຈທີ່ຢຸດຢັ້ງເຮົາຈາກການຮັກສາພັນທະສັນຍາເຫລົ່ານັ້ນ. ຕົວຢ່າງເຊັ່ນ ເຮົາຈະບໍ່ຊື້ສິ່ງຂອງ ຫລື ຫາຄວາມສຳລານໃນວັນອາທິດ ເພື່ອເຮົາຈະສາມາດຮັກສາຄວາມສັກສິດຂອງວັນຊະບາໂຕໄວ້. ເຮົາຄວນມີຄວາມປາດຖະໜາທີ່ຈະຮັບເອົາພັນທະສັນຍາທີ່ພະເຈົ້າມອບໃຫ້ເຮົາຢ່າງມີຄ່າຄວນ ແລະ ກໍພະຍາຍາມຮັກສາພັນທະສັນຍາເຫລົ່ານັ້ນ. ພັນທະສັນຍາຂອງເຮົາເຕືອນເຮົາໃຫ້ກັບໃຈທຸກໆວັນໃນຊີວິດຂອງເຮົາ. ໂດຍການຮັກສາພະບັນຍັດທັງຫລາຍ ແລະ ການຮັບໃຊ້ຄົນອື່ນໆເຮົາຈະໄດ້ຮັບ ແລະ ຮັກສາການປົດບາບຂອງເຮົາໄວ້.

ຕາມທຳມະດາແລ້ວ ພັນທະສັນຍາໄດ້ເຮັດດ້ວຍພິທີການທີ່ສັກສິດ, ດັ່ງເຊັ່ນພິທີບັບຕິດສະມາ. ພິທີການເຫລົ່ານີ້ໄດ້ຖືກປະກອບ ໂດຍອຳນາດຖານະປະໂລຫິດ. ຜ່ານພິທີບັບຕິດສະມາ, ຕົວຢ່າງເຊັ່ນ, ເຮົາເຮັດພັນທະສັນຍາວ່າ ເຮົາຈະຮັບເອົາພະນາມຂອງພະເຢຊູຄຣິດ, ລະນຶກເຖິງພະອົງຕະຫລອດເວລາ, ແລະ ຮັກສາພະບັນຍັດຂອງພະອົງ. ເມື່ອເຮົາຮັກສາພັນທະສັນຍາທີ່ເຮົາເຮັດໄວ້, ພະເຈົ້າສັນຍາວ່າ ພະອົງຈະປະທານຄວາມເປັນເພື່ອນທີ່ໃກ້ຊິດຂອງພະວິນຍານບໍລິສຸດ, ການປົດບາບ, ແລະ ການເກີດໃໝ່ໃຫ້ເຮົາ.

ຜ່ານພິທີການອັນສັກສິດ, ດັ່ງເຊັ່ນພິທີບັບຕິດສະມາ ແລະ ການຢືນຢັນ, ເຮົາຈະຮຽນຮູ້ ແລະ ມີປະສົບການກ່ຽວກັບອຳນາດຂອງພະເຈົ້າ (seeD&C 84:20). ພະເຢຊູຄຣິດໄດ້ສອນວ່າ ເຮົາຕ້ອງຮັບບັບຕິດສະມາໂດຍການລົງໄປໃນນ້ຳໝົດທັງຕົວເພື່ອການປົດບາບ, ຫລືການໃຫ້ອະໄພ, ແກ່ບາບຂອງເຮົາ. ພິທີບັບຕິດສະມາຄືພິທີການແຫ່ງຄວາມລອດທີ່ຈຳເປັນ. ບໍ່ມີຜູ້ໃດຈະສາມາດເຂົ້າໄປໃນອານາຈັກຂອງພະເຈົ້າໄດ້ປາດສະຈາກການຮັບບັບຕິດສະມາ. ພະຄຣິດໄດ້ວາງຕົວຢ່າງໄວ້ໃຫ້ເຮົາ ໂດຍການຮັບບັບຕິດສະມາ.

ພິທີບັບຕິດສະມາໂດຍການລົງໄປໃນນ້ຳໝົດທັງຕົວ ເປັນສັນຍາລັກຂອງການສິ້ນພະຊົນ, ການຝັງສົບ, ແລະ ການເປັນຄືນມາຈາກຕາຍຂອງພະຜູ້ຊ່ອຍໃຫ້ລອດ. ໃນວິທີທີ່ຄ້າຍຄືກັນ, ບັບຕິດສະມາເປັນສັນຍາລັກແຫ່ງຈຸດຈົບຂອງຊີວິດເກົ່າຂອງເຮົາທີ່ມີບາບ ແລະ ເປັນຄຳໝັ້ນສັນຍາທີ່ຈະມີຊີວິດໃໝ່ ເປັນສານຸສິດຂອງພະຄຣິດ. ພະຜູ້ຊ່ອຍໃຫ້ລອດໄດ້ສອນວ່າ ບັບຕິດສະມາຄືການເກີດໃໝ່. ເມື່ອເຮົາຮັບບັບຕິດສະມາ ເຮົາໄດ້ເລີ່ມຕົ້ນຂັ້ນຕອນຂອງການເກີດໃໝ່ ແລະ ກາຍເປັນບຸດ ແລະ ທິດາທາງວິນຍານຂອງພະຄຣິດ (ເບິ່ງ ໂມໄຊຢາ 5:7–8; ໂລມ 8:14–17).

ເຮົາຕ້ອງຮັບບັບຕິດສະມາເພື່ອຈະເປັນສະມາຊິກຂອງສາດສະໜາຈັກທີ່ຖືກຟື້ນຟູຄືນມາໃໝ່, ຄືສາດສະໜາຈັກຂອງພະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍ, ແລະ ໃນທີ່ສຸດ ຈະໄດ້ເຂົ້າສູ່ອານາຈັກສະຫວັນ. ພິທີການນີ້ຄືກົດຂອງພະເຈົ້າ ແລະ ຕ້ອງຖືກປະກອບ ໂດຍອຳນາດຂອງພະອົງ. ອະທິການ ຫລື ປະທານເຜີຍແຜ່ຕ້ອງໃຫ້ອະນຸຍາດແກ່ຜູ້ດຳລົງຖານະປະໂລຫິດ ເພື່ອປະກອບພິທີບັບຕິດສະມາ ຫລື ການຢືນຢັນ.

ເດັກນ້ອຍໆບໍ່ຈຳເປັນຕ້ອງຮັບບັບຕິສະມາ ແລະ ເຂົາໄດ້ຖືກໄຖ່ຜ່ານຄວາມເມດຕາຂອງພະເຢຊູຄິດ (ເບິ່ງ ໂມໂລໄນ 8:4–24). ເຂົາບໍ່ຕ້ອງໄດ້ຮັບບັບຕິສະມາຈົນເຂົາເຖິງອາຍຸທີ່ຕ້ອງຮັບຜິດຊອບ, ເຊິ່ງແມ່ນອາຍຸແປດປີ (see D&C 68:27).

ກ່ອນເຮົາຮັບບັບຕິສະມາ, ເຮົາສະແດງຄວາມເຕັມໃຈຂອງເຮົາທີ່ຈະເຂົ້າສູ່ພັນທະສັນຍາເພື່ອຈະຮັກສາພະບັນຍັດທັງໝົດຕະຫລອດຊີວິດຂອງເຮົາ. ຫລັງຈາກເຮົາຮັບບັບຕິສະມາແລ້ວ, ເຮົາສະແດງສັດທາຂອງເຮົາໂດຍການຮັກສາພັນທະສັນຍາຂອງເຮົາ. ອີກຢ່າງໜຶ່ງ ເຮົາໄດ້ຕໍ່ພັນທະສັນຍາທີ່ເຮົາໄດ້ເຮັດຕອນຮັບບັບຕິສະມາເປັນປະຈຳໂດຍການຮັບສິນລະລຶກ. ການຮັບສິນລະລຶກທຸກໆອາທິດເປັນພະບັນຍັດ. ມັນຊ່ອຍເຮົາໃຫ້ມີຄ່າຄວນທີ່ຈະມີພະວິນຍານສະຖິດຢູ່ນຳເຮົາຕໍ່ໄປຕະຫລອດເວລາ. ມັນເຕືອນເຮົາທຸກໆອາທິດຕໍ່ພັນທະສັນຍາຂອງເຮົາ. ພະເຢຊູຄິດໄດ້ແນະນຳພິທີການນີ້ຕໍ່ອັກຄະສາວົກທັງຫລາຍຂອງພະອົງ ກ່ອນພະອົງໄດ້ກະທຳການຊົດໃຊ້ຂອງພະອົງ. ພະອົງໄດ້ຟື້ນຟູພິທີນີ້ຂຶ້ນໃໝ່ຜ່ານສາດສະດາ ໂຈເຊັບ ສະມິດ. ພະຜູ້ຊ່ອຍໃຫ້ລອດບັນຊາວ່າຜູ້ດຳລົງຖານະປະໂລຫິດຄວນປະຕິບັດພິທີສິນລະລຶກໃຫ້ເປັນທີ່ລະນຶກເຖິງກາຍ ແລະ ໂລຫິດຂອງພະອົງ, ເຊິ່ງໄດ້ຫລັ່ງເພື່ອເຮົາທັງຫລາຍ. ໂດຍການຮັບສິນລະລຶກຢ່າງມີຄ່າຄວນ ເຮົາສັນຍາວ່າຈະຈື່ຈຳການເສຍສະລະຂອງພະອົງຕະຫລອດເວລາ, ເຮົາຕໍ່ຄຳສັນຍາຂອງເຮົາ, ແລະ ເຮົາຮັບຄຳສັນຍາໃໝ່ວ່າ ພະວິນຍານຈະສະຖິດຢູ່ນຳເຮົາຕະຫລອດເວລາ.

## ກ່ອນບັບຕິສະມາ

"ໃຫ້ໝັ້ນໃຈວ່າ [ຜູ້ສົນໃຈທັງຫລາຍ] ໄດ້ພັດທະນາສັດທາໃນພະຄິດ, ໄດ້ກັບໃຈຈາກການລ່ວງລະເມີດ, ແລະ ໄດ້ປ່ຽນແປງຊີວິດຂອງເຂົາຢ່າງພຽງພໍ ເພື່ອຈະມີຄຸນສົມບັດທີ່ຈະຮັບບັບຕິສະມາ ດັ່ງທີ່ໄດ້ບັນຊາໄວ້ໃນ Doctrine and Covenants 20:37. ຜູ້ສົນໃຈຄວນດຳລົງຊີວິດຕາມຫລັກທຳຂອງການມີຄ່າຄວນເລື່ອງສິນທຳ, ຮັກສາພະວາຈາແຫ່ງປັນຍາ, ແລະ ສັນຍາທີ່ຈະຈ່າຍເງິນສ່ວນສິບ. ຖ້າຜູ້ສອນສາດສະໜາຮູ້ສຶກວ່າ ຜູ້ສົນໃຈຕ້ອງຕຽມພ້ອມຕື່ມອີກ, ເຂົາເຈົ້າຄວນໂຈະພິທີບັບຕິສະມາໄວ້ກ່ອນ ຈົນກວ່າຜູ້ສົນໃຈເຮັດຕາມມາດຕະຖານ.

"ກ່ອນຮັບບັບຕິສະມາ ຜູ້ສົນໃຈແຕ່ລະຄົນຄວນໄດ້ຮຽນບົດຮຽນທັງໝົດຈາກຜູ້ສອນສາດສະໜາກ່ອນ, ພົບກັບອະທິການ ຫລື ປະທານສາຂາ, ແລະ ໄປຮ່ວມກອງປະຊຸມສິນລະລຶກຫລາຍເທື່ອ" ("Statement on Missionary Work," First Presidency letter, 11 Dec. 2002).

## ການສຶກສາພະຄຳພີ

### ຕົວຢ່າງຂອງພະຄິດ

2 ນີໄຟ 31:4–18
ມັດທາຍ 3:13–17

### ພັນທະສັນຍາແຫ່ງການຮັບບັບຕິສະມາ

ໂມໄຊຢາ 5:8–10
D&C 20:37
ໂມໄຊຢາ 18:8–10

### ຄຸນສົມບັດສຳລັບການຮັບບັບຕິສະມາ

2 ນີໄຟ 9:23
ໂມໂລໄນ 6:1–4
ໂມໄຊຢາ 18:8–10
D&C 20:37
Alma 7:14–15
ກິດຈະການ 2:37–39
3 ນີໄຟ 11:23–27

### ພະຜູ້ເປັນເຈົ້າຈັດພິທີສິນລະລຶກຂຶ້ນ

3 ນີໄຟ 18:1–18
ລູກາ 22:15–20

### ພອນຂອງການຮັບບັບຕິສະມາທີ່ສັນຍາໄວ້

ໂມໄຊຢາ 4:11–12, 26
ໂຢຮັນ 3:5
ໂມໂລໄນ 8:25–26
ໂລມ 6:4

### ຄຳອະທິຖານສຳລັບພິທີສິນລະລຶກ

ໂມໂລໄນ 4 ແລະ 5
D&C 20:75–79

### ການຮັບສິນລະລຶກ

D&C 27:22
1 ໂກລິນໂທ 11:23–29

### ຄວາມຈຳເປັນຂອງອຳນາດ

D&C 22
ເຮັບເລີ 5:4

ໝາຍເຫດ

ໝາຍເຫດ

## ຂອງປະທານແຫ່ງພະວິນຍານບໍລິສຸດ

ພະເຢຊູໄດ້ສອນວ່າ ເຮົາຕ້ອງໄດ້ຮັບບັບຕິດສະມາດ້ວຍນ້ຳ ແລະ ດ້ວຍພະວິນຍານ. ຫລັງຈາກບັບຕິດສະມາດ້ວຍນ້ຳແລ້ວ ຈະຕ້ອງບັບຕິດສະມາດ້ວຍພະວິນຍານນຳອີກ ຖ້າບໍ່ດັ່ງນັ້ນ ມັນຈະບໍ່ສົມບູນ. ໂດຍການຮັບພິທີບັບຕິດສະມາ ແລະ ຮັບເອົາຂອງປະທານແຫ່ງພະວິນຍານບໍລິສຸດເທົ່ານັ້ນ ເຮົາຈຶ່ງຈະສາມາດໄດ້ຮັບການປົດບາບຂອງເຮົາ ແລະ ໄດ້ຮັບການເກີດໃໝ່ທາງວິນຍານຢ່າງສົມບູນ. ຫລັງຈາກນັ້ນ ເຮົາຈຶ່ງເລີ່ມຕົ້ນຊີວິດທາງວິນຍານໃໝ່ ເປັນສານຸສິດຂອງພະຄິດ.

ຫລັງຈາກຄົນ ຄົນໜຶ່ງໄດ້ຮັບບັບຕິດສະມາໂດຍນ້ຳແລ້ວ, ຜູ້ດຳລົງຖານະປະໂລຫິດຄົນໜຶ່ງ ຫລື ຫລາຍກວ່ານັ້ນ ຈະວາງມືຂອງເຂົາເຈົ້າໃສ່ເທິງຫົວຂອງຄົນ ຄົນນັ້ນ ແລະ ຢືນຢັນເຂົາໃຫ້ເປັນສະມາຊິກຂອງສາດສະໜາຈັກຂອງພະເຢຊູຄິດແຫ່ງສິດທິຊົນຍຸກສຸດທ້າຍ. ຫລັງຈາກນັ້ນ ເຂົາເຈົ້າຈະມອບຂອງປະທານແຫ່ງພະວິນຍານບໍລິສຸດໃຫ້.

ຄົນທີ່ໄດ້ຮັບຂອງປະທານແຫ່ງພະວິນຍານບໍລິສຸດ ແລະ ມີຄ່າຄວນຢູ່ຕໍ່ໄປ ສາມາດຊື່ນຊົມກັບຄວາມເປັນເພື່ອນຂອງພະອົງຕະຫລອດຊີວິດຂອງເຂົາ. ພະວິນຍານບໍລິສຸດມີຜົນສະທ້ອນທີ່ເຮັດໃຫ້ເຮົາສັກສິດ ແລະ ສະອາດ. ພະວິນຍານບໍລິສຸດເປັນພະຍານເຖິງພະຄິດ ແລະ ຊ່ອຍເຮົາໃຫ້ຮູ້ເຖິງຄວາມຈິງ. ພະອົງເຮັດໃຫ້ເຮົາມີຄວາມເຂັ້ມແຂງທາງວິນຍານ ແລະ ຊ່ອຍເຮົາໃຫ້ເຮັດສິ່ງທີ່ຖືກຕ້ອງ. ພະອົງປອບໃຈເຮົາໃນລະຍະການທົດສອບ ແລະ ໂສກເສົ້າ. ພະອົງເຕືອນເຮົາກ່ຽວກັບອັນຕະລາຍທາງວິນຍານ ແລະ ທາງຮ່າງກາຍ. ພະວິນຍານບໍລິສຸດມອບອຳນາດໃຫ້ເຮົາ ເພື່ອສອນ ແລະ ຮຽນ. ຂອງປະທານແຫ່ງພະວິນຍານບໍລິສຸດເປັນຂອງປະທານອັນລ້ຳຄ່າຂອງພະບິດາເທິງສະຫວັນຂອງເຮົາ. ຜ່ານອຳນາດຂອງພະວິນຍານບໍລິສຸດ ເຮົາຈະສາມາດຮູ້ສຶກເຖິງຄວາມຮັກ ແລະ ການຊີ້ນຳຂອງພະອົງທີ່ມີຕໍ່ເຮົາ. ຂອງປະທານນີ້ເປັນຕົວຢ່າງທີ່ເລັກນ້ອຍຂອງຄວາມສຸກນິລັນດອນ ແລະ ຄຳສັນຍາຕໍ່ຊີວິດນິລັນດອນ.

ອຳນາດຖານະປະໂລຫິດຈຳເປັນຕ້ອງປະກອບພິທີນີ້, ເຊິ່ງໄດ້ສູນຫາຍໄປເປັນເວລາຫລາຍສັດຕະວັດເພາະການປະຖິ້ມຄວາມເຊື່ອ, ໄດ້ຖືກຟື້ນຟູຄືນມາໃໝ່ຜ່ານສາດສະດາ ໂຢເຊັບ ສະມິດ. ຜ່ານການເປັນສະມາຊິກໃນສາດສະໜາຈັກເທົ່ານັ້ນ ຈຶ່ງຈະສາມາດໄດ້ຮັບຂອງປະທານແຫ່ງພະວິນຍານບໍລິສຸດນີ້. ອຳນາດນີ້ເຮັດໃຫ້ສາດສະໜາຈັກ ແຕກຕ່າງຈາກສາດສະໜາອື່ນໆໃນໂລກ. ຕາມການປະກາດຂອງພະຜູ້ເປັນເຈົ້າ, ພະອົງກ່າວວ່າ ນີ້ຄືສາດສະໜາຈັກທີ່ແທ້ຈິງ ແລະ ດຳລົງຢູ່ແຫ່ງດຽວໃນແຜ່ນດິນໂລກ (see D&C 1:37).

### ການນຳພາຈາກພະວິນຍານບໍລິສຸດ

ອະທິບາຍໃຫ້ຄົນທີ່ທ່ານສອນວ່າ ຊາຕານຕໍ່ຕ້ານພະເຈົ້າ ແລະ ລໍ້ລວງຄົນໃຫ້ເຮັດບາບ. ເພື່ອຈະຮັກສາຄວາມຮູ້ສຶກທີ່ດີທີ່ເຂົາເຈົ້າມີໃນຊ່ວງທີ່ເຂົາເຈົ້າໄດ້ຮັບການສິດສອນຈາກຜູ້ສອນສາດສະໜາ, ເຂົາເຈົ້າຄວນອ່ານພະຄຳພີມໍມອນ, ອະທິຖານ, ໄປໂບດ, ແລະ ເຊື່ອຟັງພະບັນຍັດ. ໃຫ້ອະທິບາຍວ່າ ການໄດ້ຮັບການນຳພາຈາກພະວິນຍານບໍລິສຸດຕໍ່ໄປ ເປັນສິ່ງໜຶ່ງໃນຜົນປະໂຫຍດຫລາຍໆຢ່າງຂອງການຮັບບັບຕິດສະມາ ແລະ ຮັບການຢືນຢັນ.

### ການສຶກສາພະຄຳພີ

**ລັກສະນະຂອງພະວິນຍານບໍລິສຸດ**

- D&C 130:22–23
- ໂຢຮັນ 3:1–8
- ຄາລາເຕຍ 5:22–23
- Bible Dictionary, "Earnest" and "Holy Ghost"

**ພອນຕ່າງໆ ແລະ ອິດທິພົນຂອງພະວິນຍານບໍລິສຸດ**

- 2 ນີໄຟ 32:1–5
- 2 ນີໄຟ 33:1–2
- Moses 6:61
- ໂຢຮັນ 14:26
- Topical Guide, "Holy Ghost, Comforter" and "Holy Ghost, Gifts of"

ໝາຍເຫດ

**ຄວາມສຳຄັນຂອງ ຂອງປະທານແຫ່ງພະວິນຍານບໍລິສຸດ**

2 ນີໄຟ 31:11–12, 18, 21 | 3 ນີໄຟ 19:13 | D&C 33:15
3 ນີໄຟ 18:36–37 | D&C 19:31 | ກິດຈະການ 19:1–6
3 ນີໄຟ 27:19–20

## ອົດທົນຈົນເຖິງທີ່ສຸດ

ຫລັງຈາກເຮົາໄດ້ເຂົ້າໄປໃນຫົນທາງທີ່ຊື່ ແລະ ແຄບແລ້ວ ໂດຍສັດທາຂອງເຮົາໃນພະເຢຊູຄຣິດ, ໂດຍການກັບໃຈ, ແລະ ໂດຍການຮັບບັບຕິດສະມາ ແລະ ຮັບການຢືນຢັນ, ເຮົາຕ້ອງໃຊ້ຄວາມພະຍາຍາມທຸກຢ່າງເພື່ອຈະຢູ່ໃນເສັ້ນທາງ. ເຮົາເຮັດແບບນັ້ນໂດຍການໃຊ້ສັດທາໃນພະເຢຊູຄຣິດ, ກັບໃຈ, ເຮັດຄຳໝັ້ນສັນຍາ, ແລະ ເຮັດຕາມພະວິນຍານຕໍ່ໄປ.

ຫລັງຈາກເຮົາໄດ້ຮັບການອະໄພຈາກບາບຂອງເຮົາ, ເຮົາຄວນພະຍາຍາມທຸກວັນ ເພື່ອຫລີກເວັ້ນຈາກການເຮັດບາບ ເພື່ອວ່າເຮົາຈະສາມາດມີພະວິນຍານບໍລິສຸດສະຖິດຢູ່ນຳເຮົາຕະຫລອດເວລາ. ໃນພັນທະສັນຍາຂອງການຮັບບັບຕິດສະມາ, ເຮົາໄດ້ສັນຍາກັບພະບິດາຜູ້ສະຖິດໃນສະຫວັນຂອງເຮົາວ່າ ເຮົາຈະເຊື່ອຟັງພະບັນຍັດຂອງພະອົງຕະຫລອດຊີວິດຂອງເຮົາ. ຖ້າວ່າເຮົາຜິດພາດ ເຮົາຕ້ອງກັບໃຈ ເພື່ອຈະມີພອນແຫ່ງພັນທະສັນຍາຢູ່ນຳເຮົາສະເໝີ. ເຮົາສັນຍາວ່າ ຈະເຮັດຄວາມດີ, ຮັບໃຊ້ຄົນອື່ນໆ, ແລະ ເຮັດຕາມຕົວຢ່າງຂອງພະຜູ້ຊ່ອຍໃຫ້ລອດ. ໃນພະຄຳພີ, ຄຳໝັ້ນສັນຍາອັນຕະຫລອດຊີວິດນີ້ ຈະກ່າວເຖິງເລື້ອຍໆວ່າເປັນ "ການອົດທົນຈົນເຖິງທີ່ສຸດ."

ໂດຍການເຮັດຕາມເສັ້ນທາງຂອງພະກິດຕິຄຸນ, ເຮົາສາມາດເຂົ້າໃກ້ພະເຈົ້າຫລາຍຂຶ້ນ, ເອົາຊະນະການລໍ້ລວງ ແລະ ບາບ, ແລະ ຊື່ນຊົມນຳຂອງປະທານແຫ່ງພະວິນຍານບໍລິສຸດຢ່າງລົ້ນເຫລືອ. ເມື່ອເຮົາເຮັດຕາມເສັ້ນທາງນີ້ຕະຫລອດຊີວິດຂອງເຮົາຢ່າງອົດທົນ, ຢ່າງສັດຊື່, ແລະ ຢ່າງສະໝ່ຳສະເໝີ, ແລ້ວເຮົາຈະເໝາະສົມທີ່ຈະໄດ້ຮັບຊີວິດນິລັນດອນ.

ສັດທາໃນພະຄຣິດ; ການກັບໃຈ; ການເຮັດພັນທະສັນຍາ, ການຕໍ່ພັນທະສັນຍາ, ແລະ ການຮັກສາພັນທະສັນຍາ; ແລະ ການຖືກຊຳລະໂດຍພະວິນຍານ ເປັນແບບແຜນຂອງການດຳລົງຊີວິດ. ການກະທຳຂອງເຮົາໃນຊີວິດປະຈຳວັນຈະຖືກຫລໍ່ຫລອມ ແລະ ຖືກປົກຄອງໂດຍຫລັກທຳເຫລົ່ານີ້. ຄວາມສະຫງົບ ແລະ ຄວາມປິຕິຍິນດີເກີດຂຶ້ນໂດຍການເຮັດຕາມວິທີນີ້, ແລະ ເຮົາຈະມີຄຸນສົມບັດເໝືອນດັ່ງພະຄຣິດຫລາຍຂຶ້ນ ເທື່ອລະເລັກເທື່ອລະນ້ອຍ. ໃນທີ່ສຸດ, ເມື່ອເຮົາເຮັດຕາມວິທີນີ້ ແລະ "ມຸ້ງໜ້າດ້ວຍຄວາມໝັ້ນຄົງໃນພະຄຣິດ . . . ແລະ ອົດທົນຈົນເຖິງທີ່ສຸດ," ແລ້ວເຮົາຈະໄດ້ຮັບສັນຍາວ່າ, "ເຈົ້າຈະມີຊີວິດນິລັນດອນ" (2 ນີໄຟ 31:20).

### ການສຶກສາພະຄຳພີ

**ອົດທົນຈົນເຖິງທີ່ສຸດ**

2 ນີໄຟ 9:24 | 3 ນີໄຟ 27:16–17 | ມັດທາຍ 10:22
2 ນີໄຟ 31:14–20

**ພອນສຳລັບຜູ້ທີ່ອົດທົນ**

1 Nephi 13:37 | 3 ນີໄຟ 15:9 | D&C 14:7

### ການເຊື້ອເຊີນໃຫ້ຮັບບັບຕິດສະມາ

ການເຊື້ອເຊີນໃຫ້ຮັບບັບຕິດສະມາ ແລະ ຮັບການຢືນຢັນຄວນຈະແຈ່ມແຈ້ງ ແລະ ໂດຍກົງ: "ທ່ານຈະເຮັດຕາມຕົວຢ່າງຂອງພະເຢຊູຄຣິດ ໂດຍການຮັບບັບຕິດສະມາຈາກຄົນຜູ້ໜຶ່ງທີ່ມີອຳນາດຖານະປະໂລຫິດຂອງພະເຈົ້າບໍ? ເຮົາຈະມີພິທີບັບຕິດສະມາໃນ (ວັນທີ). ທ່ານຈະຕຽມຕົວເພື່ອຮັບບັບຕິດສະມາໃນວັນນັ້ນບໍ?"

ໝາຍເຫດ

# ແນວຄິດສຳລັບການສອນ

ພາກນີ້ຈະໃຫ້ແນວຄິດແກ່ທ່ານເພື່ອໃຊ້ໃນການຕຽມ ແລະ ສອນບົດຮຽນນີ້. ຈົ່ງອະທິຖານ ແລະ ເຮັດຕາມພະວິນຍານເມື່ອທ່ານຕັດສິນໃຈນຳໃຊ້ແນວຄິດເຫລົ່ານີ້. ໃຫ້ເພີ່ມແນວຄິດທີ່ທ່ານເລືອກໃສ່ໃນແຜນບົດຮຽນຂອງທ່ານ. ຈົ່ງເຂົ້າໃຈວ່າ ແນວຄິດເຫລົ່ານີ້ເປັນພຽງແຕ່ຂໍ້ແນະນຳເທົ່ານັ້ນ ເພື່ອຊ່ອຍ ທ່ານໃຫ້ສະໜອງຄວາມຕ້ອງການຂອງຄົນທີ່ທ່ານສອນ, ແຕ່ບໍ່ແມ່ນເງື່ອນໄຂທີ່ຈຳເປັນ.

## ແຜນບົດຮຽນສັ້ນ (3–5 ນາທີ)

ພະກິດຕິຄຸນຂອງພະເຢຊູຄຣິດເປັນຫົນທາງດຽວເທົ່ານັ້ນທີ່ຈະນຳໄປສູ່ຊີວິດນິລັນດອນ. ຫລັກທຳ ແລະ ພິທີການເບື້ອງຕົ້ນຂອງພະກິດຕິຄຸນຂອງພະອົງຄື ສັດທາໃນພະເຢຊູຄຣິດ, ການກັບໃຈ, ບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວເພື່ອການປົດບາບ, ແລະ ຂອງປະທານແຫ່ງພະວິນຍານບໍລິສຸດ. ຫລັງຈາກນັ້ນ ເຮົາຕ້ອງອົດທົນຈົນເຖິງທີ່ສຸດ. ໂດຍການໃຊ້ຫລັກທຳເຫລົ່ານີ້ຕະຫລອດຊີວິດຂອງເຮົາ, ເຮົາໄດ້ເຮັດຕາມຕົວຢ່າງຂອງພະຜູ້ຊ່ອຍໃຫ້ລອດ, ຮຽນທີ່ຈະຮັກສາພະບັນຍັດຂອງພະອົງ, ແລະ ພັດທະນາຄຸນສົມບັດໃຫ້ເປັນເໝືອນພະຄຣິດ. ເຮົາສາມາດຮັບການອະໄພຈາກບາບຂອງເຮົາ, ແລະ ເຮົາຈະສາມາດກັບຄືນໄປຢູ່ໃນທີ່ປະທັບຂອງພະບິດາຜູ້ສະຖິດໃນສະຫວັນຂອງເຮົາ.

- ຜ່ານພະຄຣິດ ເຮົາສາມາດຖືກຊຳລະຈາກບາບ
- ສັດທາໃນພະເຢຊູຄຣິດ
- ການກັບໃຈ
- ບັບຕິສະມາ, ພັນທະສັນຍາຂໍ້ທຳອິດຂອງເຮົາ
- ຂອງປະທານແຫ່ງພະວິນຍານບໍລິສຸດ
- ອົດທົນຈົນເຖິງທີ່ສຸດ

### ຄຳໝັ້ນສັນຍາ

- ທ່ານຈະພັດທະນາສັດທາໃນພະເຢຊູຄຣິດໂດຍການຮຽນຮູ້ກ່ຽວກັບພະກິດຕິຄຸນຂອງພະອົງຕໍ່ໄປບໍ?
- ທ່ານຈະກັບໃຈ ແລະ ອະທິຖານເພື່ອຈະໄດ້ຮັບການໃຫ້ອະໄພຈາກບາບບໍ?
- ທ່ານຈະຮັບບັບຕິສະມາເພື່ອເປັນສະມາຊິກຂອງສາດສະໜາຈັກຂອງພະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍໃນ (ວັນທີ) ບໍ? ທ່ານຈະຮັບເອົາການຢືນຢັນ ແລະ ຮັບເອົາຂອງປະທານແຫ່ງພະວິນຍານບໍລິສຸດບໍ?
- ທ່ານຈະໄປໂບດນຳພວກເຮົາບໍ່ວັນອາທິດນີ້?
- ພວກເຮົາຂໍນັດເວລາມາຢ້ຽມຢາມເທື່ອໜ້າໄດ້ບໍ?
- ພະບັນຍັດຈາກບົດຮຽນທີ 4 ທີ່ທ່ານເລືອກເອົາມາຮ່ວມ.

ໝາຍເຫດ

## ແຜນບົດຮຽນຍາວປານກາງ (10–15 ນາທີ)

ຂ່າວສານຂອງເຮົາຄືຂ່າວສານແຫ່ງສັດທາ ແລະ ຄວາມຫວັງ. ເຮົາຮັກ ແລະ ນະມັດສະການພະເຢຊູຄິດ. ພະອົງຄືສູນກາງຂອງແຜນຂອງພະເຈົ້າສຳລັບຄວາມສຸກຂອງເຮົາ. ການເສຍສະລະການຊົດໃຊ້ຂອງພະຄິດ ເຮັດໃຫ້ຊີວິດນິລັນດອນໃນທີ່ປະທັບຂອງພະເຈົ້າເປັນໄປໄດ້. ເມື່ອເຮົາດຳລົງຊີວິດຕາມພະກິດຕິຄຸນຂອງພະອົງ, ພະອົງຈະອະໄພບາບຂອງເຮົາດ້ວຍຄວາມເມດຕາຂອງພະອົງ. ພະອົງຈະປິ່ນປົວເຮົາ ແລະ ແທນຄວາມຮູ້ສຶກຜິດ ແລະ ລະອາຍໃຈກັບຄວາມສະຫງົບ ແລະ ຄວາມສຸກໃນຊີວິດນີ້.

ພະກິດຕິຄຸນຂອງພະເຢຊູຄິດເປັນສິ່ງທີ່ເຂົ້າໃຈງ່າຍ. ເລີ້ມຕົ້ນດ້ວຍສັດທາໃນພະຄິດ. ເຮົາເຊື່ອໃນພະອົງ, ໄວ້ວາງໃຈໃນພະອົງ, ແລະ ອາໄສພະອົງ. ສັດທາແບບນີ້ນຳເຮົາໄປສູ່ການກັບໃຈ—ໃຫ້ຢຸດເຮັດສິ່ງທີ່ຜິດ ແລະ ເຮັດສິ່ງທີ່ຖືກຕ້ອງຕໍ່ໄປ. ອີກຢ່າງໜຶ່ງສັດທາຂອງເຮົາໃນພະອົງເຮັດໃຫ້ເຮົາຢາກສະແດງຄວາມຮັກຂອງເຮົາໂດຍການຮັກສາພະບັນຍັດຂອງພະອົງ, ຮ່ວມດ້ວຍຮັບບັບຕິດສະມາ. ຫລັງຈາກຮັບບັບຕິດສະມາແລ້ວ, ພະອົງສັນຍາວ່າຈະໃຫ້ຂອງປະທານແຫ່ງພະວິນຍານບໍລິສຸດແກ່ເຮົາ. ພະວິນຍານບໍລິສຸດຈະນຳພາເຮົາ, ປອບໂຍນເຮົາ ແລະ ຊ່ອຍເຮົາໃຫ້ຮູ້ເຖິງຄວາມຈິງ. ເຮົາສາມາດຮູ້ໃນຫົວໃຈ ແລະ ຄວາມຄິດຂອງເຮົາເມື່ອພະວິນຍານບໍລິສຸດສະຖິດຢູ່ນຳເຮົາ. ເຮົາຈະມີຄວາມຮູ້ສຶກສະຫງົບ, ມີຄວາມຮັກ, ແລະ ມີຄວາມປິຕິຍິນດີ. ເຮົາຈະຢາກຮັບໃຊ້ຄົນອື່ນ. ເຮົາຈະພະຍາຍາມຕະຫລອດຊີວິດຂອງເຮົາເພື່ອເຮັດໃຫ້ພະຜູ້ເປັນເຈົ້າພໍພະໄທ.

ພະເຢຊູຄິດໄດ້ຟື້ນຟູພະກິດຕິຄຸນຂອງພະອົງຄືນມາໃໝ່ ຜ່ານສາດສະດາໃນຍຸກສຸດທ້າຍ. ເຮົາຮຽນຮູ້ກ່ຽວກັບພະກິດຕິຄຸນໃນພະຄຳພີມໍມອນ, ເຊິ່ງທ່ານສາມາດອ່ານ, ໄຕ່ຕອງ, ແລະ ອະທິຖານກ່ຽວກັບພະຄຳພີນັ້ນ. ພະເຈົ້າຈະບອກທ່ານໂດຍອຳນາດຂອງພະວິນຍານບໍລິສຸດວ່າ ມັນແມ່ນຄວາມຈິງ. ເມື່ອທ່ານຮູ້ວ່າມັນແມ່ນຄວາມຈິງ, ທ່ານຈະຢາກກັບໃຈ ແລະ ຮັບບັບຕິດສະມາ ເພື່ອທ່ານຈະໄດ້ຮັບການ

ປົດບາບຂອງທ່ານ ແລະ ຮັບເອົາຂອງປະທານແຫ່ງພະວິນຍານບໍລິສຸດ.

### ຄຳໝັ້ນສັນຍາ

- ທ່ານຈະພັດທະນາສັດທາໃນພະເຢຊູຄິດໂດຍການຮຽນຮູ້ກ່ຽວກັບພະກິດຕິຄຸນຂອງພະອົງຕໍ່ໄປບໍ?
- ທ່ານຈະກັບໃຈ ແລະ ອະທິຖານເພື່ອຈະໄດ້ຮັບການໃຫ້ອະໄພຈາກບາບບໍ?
- ທ່ານຈະຮັບບັບຕິດສະມາເພື່ອເປັນສະມາຊິກຂອງສາດສະໜາຈັກຂອງພະເຢຊູຄິດແຫ່ງສິດທິຊົນຍຸກສຸດທ້າຍໃນ (ວັນທີ) ບໍ? ທ່ານຈະຮັບເອົາການຢືນຢັນ ແລະ ຮັບເອົາຂອງປະທານແຫ່ງພະວິນຍານບໍລິສຸດບໍ?
- ທ່ານຈະໄປໂບດນຳພວກເຮົາບໍ່ວັນອາທິດນີ້?
- ພວກເຮົາຂໍນັດເວລາມາຢ້ຽມຢາມເທື່ອໜ້າໄດ້ບໍ?
- ພະບັນຍັດຈາກບົດຮຽນທີ 4 ທີ່ທ່ານເລືອກເອົາມາຮ່ວມ.

ບົດຮຽນທີ 3:
ພະກິດຕິຄຸນຂອງພະເຍຊູຄຣິດ

ໝາຍເຫດ

### ແຜນບົດຮຽນທັງໝົດ (30–45 ນາທີ)

- ຜ່ານພະຄຣິດ ເຮົາສາມາດຖືກຊຳລະຈາກບາບ
  - ພະເຈົ້າໄດ້ສົ່ງພະບຸດທີ່ຮັກຂອງພະອົງ, ພະເຍຊູຄຣິດ, ມາສູ່ໂລກ (ເບິ່ງ ໂຢຮັນ 3:16–17).
  - ຜ່ານພະຄຸນ ແລະ ຄວາມເມດຕາຂອງພະຄຣິດເທົ່ານັ້ນ ເຮົາຈຶ່ງຈະສາມາດຖືກຊຳລະຈາກບາບ (ເບິ່ງ 2 ນີໄຟ 2:6–8).
  - ເຮົາມີຄວາມຮັບຜິດຊອບໃນການທີ່ຈະຍອມຮັບພະຄຣິດ, ກັບໃຈ, ແລະ ເຊື່ອຟັງ.
- ສັດທາໃນພະເຍຊູຄຣິດ
  - ເຮົາຕ້ອງເຊື່ອໃນພະຄຣິດວ່າເປັນພະຜູ້ຊ່ອຍໃຫ້ລອດຂອງໂລກ.
  - ພະອົງຢາກໃຫ້ເຮົາຍອມຮັບ ແລະ ເຮັດຕາມຄຳສອນຂອງພະອົງ.
  - ເຮົາໄດ້ຮັບພອນເມື່ອເຮົາເຊື່ອຟັງ (see D&C 130:20–21).
- ການກັບໃຈ
  - ສັດທາໃນພະຄຣິດນຳເຮົາໄປສູ່ການກັບໃຈ (ເບິ່ງ ແອລະມາ 34).
  - ເຮົາຮູ້ສຶກເສຍໃຈເໝືອນດັ່ງພະເຈົ້າເສຍໃຈ (ເບິ່ງ 2 ໂກລິນໂທ 7:9–10).
  - ເຮົາຢຸດເຮັດສິ່ງທີ່ຜິດ ແລະ ເຮັດສິ່ງທີ່ຖືກຕ້ອງຕໍ່ໄປ.
  - ເຮົາສາລະພາບບາບຂອງເຮົາ, ແລະ ເຮົາສາລະພາບບາບທີ່ຮ້າຍແຮງຂອງເຮົາຕໍ່ຜູ້ນຳຂອງສາດສະໜາຈັກ, ຜູ້ທີ່ສາມາດຊ່ອຍເຮົາໃຫ້ກັບໃຈໄດ້ (see D&C 58:43).
  - ເຮົາຮັບການໃຫ້ອະໄພ; ຄວາມຮູ້ສຶກເຮັດຜິດ ແລະ ຄວາມເສຍໃຈ ຈະຖືກແທນດ້ວຍຄວາມສະຫງົບ (see Alma 36:17–21).
- ບັບຕິສະມາ, ພັນທະສັນຍາອັນທຳອິດຂອງເຮົາ
  - ພິທີການຄືພິທີອັນສັກສິດ ເຊິ່ງຜ່ານພິທີນັ້ນ ເຮົາໄດ້ເຮັດພັນທະສັນຍານຳພະເຈົ້າ.
  - ພັນທະສັນຍາຄືການຕົກລົງອັນສັກສິດລະຫວ່າງພະເຈົ້າ ແລະ ລູກໆຂອງພະອົງ.
  - ການຮັກສາພັນທະສັນຍາຈະນຳພອນມາໃຫ້
  - ເຮົາຮັບບັບຕິສະມາໂດຍການລົງໄປໃນນ້ຳໝົດທັງຕົວເພື່ອການປົດບາບ (ເບິ່ງ ຫລັກແຫ່ງຄວາມເຊື່ອ 1:4).
  - ເມື່ອເຮົາຮັບບັບຕິສະມາ ເຮົາໄດ້ເລີ່ມຕົ້ນຊີວິດໃໝ່ໃນຄຳສັນຍາຕໍ່ພະຄຣິດ (ເບິ່ງ ໂລມ 6:3–8).

ໝາຍເຫດ

- ພິທີບັບຕິດສະມາຕ້ອງຖືກປະກອບໂດຍຄົນຜູ້ໜຶ່ງທີ່ມີອຳນາດຖານະປະໂລຫິດ.
- ເຮົາຕໍ່ພັນທະສັນຍາຂອງເຮົາໂດຍການຮັບສິນລະລຶກທຸກໆອາທິດ (D&C 20:77, 79).

- ຂອງປະທານແຫ່ງພະວິນຍານບໍລິສຸດ
  - ຫລັງຈາກບັບຕິດສະມາໂດຍການລົງໄປໃນນ້ຳໝົດທັງຕົວແລ້ວ ຕ້ອງມີບັບຕິດສະມາດ້ວຍພະວິນຍານນຳອີກ; ພິທີທັງສອງນີ້ແຍກກັນບໍ່ໄດ້.
  - ຜູ້ທີ່ດຳລົງຖານະປະໂລຫິດຈະມອບຂອງປະທານແຫ່ງພະວິນຍານບໍລິສຸດໃຫ້ ໂດຍການວາງມື.
  - ພະວິນຍານບໍລິສຸດຈະສອນເຮົາ, ຊຳລະເຮົາ, ປອບໃຈເຮົາ, ເປັນພະຍານເຖິງຄວາມຈິງ, ເຕືອນເຮົາ, ແລະ ນຳພາເຮົາ (ເບິ່ງ 2 ນີໄຟ 32:1–5; ໂມໄຊຢາ 5:1–6; ໂມໂລໄນ 10:5; D&C 36:2).

- ອົດທົນຈົນເຖິງທີ່ສຸດ
  - ເຮົາຕ້ອງດຳເນີນຕໍ່ໄປຫລັງຈາກເຮົາໄດ້ຮັບບັບຕິດສະມາ ແລະ ການຢືນຢັນແລ້ວ.
  - ເຮົາເຮັດຢ່າງດີທີ່ສຸດເພື່ອຈະເປັນອິດສະລະຈາກບາບ ເພື່ອເຮົາຈະສາມາດຊື່ນຊົມກັບຂອງປະທານແຫ່ງພະວິນຍານບໍລິສຸດ.
  - ໂດຍການເຮັດຕາມເສັ້ນທາງແຫ່ງສັດທາຢ່າງສັດຊື່, ການກັບໃຈ, ການເຮັດ ແລະ ການຮັກສາພັນທະສັນຍາ, ແລະ ການຮັບເອົາພະວິນຍານບໍລິສຸດ, ເຮົາຈະສາມາດດີພໍທີ່ຈະມີຊີວິດນິລັນດອນໄດ້. (ເບິ່ງ 2 ນີໄຟ 31:14–20).
  - ເຮົາຕ້ອງກັບໃຈເປັນປະຈຳຕະຫລອດຊີວິດຂອງເຮົາ (see D&C 19:15–20).

### ຄຳໝັ້ນສັນຍາ

- ທ່ານຈະພັດທະນາສັດທາໃນພະເຢຊູຄຣິດໂດຍການຮຽນຮູ້ກ່ຽວກັບພະກິດຕິຄຸນຂອງພະອົງຕໍ່ໄປບໍ?
- ທ່ານຈະກັບໃຈ ແລະ ອະທິຖານເພື່ອຈະໄດ້ຮັບການໃຫ້ອະໄພຈາກບາບບໍ?
- ທ່ານຈະຮັບບັບຕິດສະມາເພື່ອເປັນສະມາຊິກຂອງສາດສະໜາຈັກຂອງພະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍໃນ (ວັນທີ) ບໍ? ທ່ານຈະຮັບເອົາການຢືນຢັນ ແລະ ຮັບເອົາຂອງປະທານແຫ່ງພະວິນຍານບໍລິສຸດບໍ?
- ທ່ານຈະໄປໂບດນຳພວກເຮົາບໍ່ວັນອາທິດນີ້?
- ພວກເຮົາຂໍນັດເວລາມາຢ້ຽມຢາມເທື່ອໜ້າໄດ້ບໍ?
- ພະບັນຍັດຈາກບົດຮຽນທີ 4 ທີ່ທ່ານເລືອກເອົາມາຮ່ວມ.

ໝາຍເຫດ

## ຄຳຖາມທີ່ຕ້ອງຖາມຫລັງຈາກສອນແລ້ວ

- ທ່ານມີຄຳຖາມຫຍັງບໍ່ກ່ຽວກັບສິ່ງທີ່ພວກເຮົາສອນມາ?
- ການກັບໃຈໝາຍຄວາມວ່າແນວໃດ?
- ເປັນຫຍັງຂອງປະທານແຫ່ງພະວິນຍານບໍລິສຸດຈຶ່ງເປັນສ່ວນສຳຄັນຂອງພະກິດຕິຄຸນ?
- ເປັນຫຍັງມັນຈຶ່ງສຳຄັນສຳລັບທ່ານທີ່ຈະຮັບບັບຕິດສະມາ ແລະ ຮັບຂອງປະທານແຫ່ງພະວິນຍານບໍລິສຸດ?
- ມີຫຍັງແດ່ຢູ່ໃນການປະຊຸມໂບດທີ່ທ່ານບໍ່ເຂົ້າໃຈ?
- ມີຫຍັງແດ່ຢູ່ໃນການປະຊຸມໂບດທີ່ທ່ານມັກຫລາຍ?

## ການອະທິບາຍຄຳສັບທີ່ສຳຄັນ

- **ການຢືນຢັນ:** ການວາງມືໂດຍຜູ້ດຳລົງຖານະປະໂລຫິດແຫ່ງເມນຄີເສເດັກ ເພື່ອໃຫ້ເປັນສະມາຊິກຂອງສາດສະໜາຈັກ ແລະ ເພື່ອມອບຂອງປະທານແຫ່ງພະວິນຍານບໍລິສຸດ.
- **ພັນທະສັນຍາ:** ການຕົກລົງລະຫວ່າງພະເຈົ້າ ແລະ ລູກໆຂອງພະອົງ. ເຮົາບໍ່ໄດ້ມີຖານະສະເໝີພາບ ໃນການຕົກລົງນີ້. ພະເຈົ້າໃຫ້ເງື່ອນໄຂກ່ຽວກັບພັນທະສັນຍາ, ແລະເຮົາຕົກລົງທີ່ຈະເຮັດສິ່ງທີ່ພະອົງມອບໃຫ້ເຮົາເຮັດ. ຫລັງຈາກນັ້ນ ພະເຈົ້າກໍສັນຍາກັບເຮົາວ່າພະອົງຈະພອນບາງຢ່າງໃຫ້ເຮົາສຳລັບການເຊື່ອຟັງນັ້ນ. ເຮົາໄດ້ຮັບພິທີການຕ່າງໆໂດຍພັນທະສັນຍາ. ເມື່ອເຮົາເຮັດພັນທະສັນຍາເຊັ່ນນັ້ນ, ເຮົາໄດ້ສັນຍາທີ່ຈະຮັກສາມັນ. ຕົວຢ່າງເຊັ່ນ, ສະມາຊິກຂອງສາດສະໜາຈັກເຮັດພັນທະສັນຍານຳພະຜູ້ເປັນເຈົ້າຕອນຮັບບັບຕິດສະມາ ວ່າຈະຕໍ່ພັນທະສັນຍານັ້ນ ໂດຍການຮັບສິນລະລຶກ. ເຮົາເຮັດພັນທະສັນຍາຕື່ມອີກໃນພະວິຫານ. ຜູ້ຄົນຂອງພະຜູ້ເປັນເຈົ້າແມ່ນຜູ້ຄົນແຫ່ງພັນທະສັນຍາ. ເຮົາໄດ້ຮັບພອນອັນຍິ່ງໃຫຍ່ເມື່ອເຮົາຮັກສາພັນທະສັນຍາທີ່ເຮົາເຮັດໄວ້ນຳພະຜູ້ເປັນເຈົ້າ.
- **ອົດທົນຈົນເຖິງທີ່ສຸດ:** ທີ່ຈະສັດຊື່ຕໍ່ພະບັນຍັດຂອງພະເຈົ້າ ເຖິງແມ່ນວ່າ ມີການລໍ້ລວງ, ຄວາມກົງກັນຂ້າມ, ແລະ ຄວາມທຸກຍາກລຳບາກຕະຫລອດຊີວິດກໍຕາມ.
- **ຊີວິດນິລັນດອນ:** ທີ່ຈະມີຊີວິດຕະຫລອດໄປເປັນຄອບຄົວໃນທີ່ປະທັບຂອງພະເຈົ້າ (see D&C 132:19–20). ຊີວິດນິລັນດອນເປັນຂອງປະທານທີ່ຍິ່ງໃຫຍ່ທີ່ສຸດທີ່ພະເຈົ້າໄດ້ມອບໃຫ້ມະນຸດ.
- **ພະກິດຕິຄຸນ:** ແຜນແຫ່ງຄວາມລອດຂອງພະເຈົ້າ, ທີ່ເຮັດໃຫ້ເປັນໄປໄດ້ຜ່ານການຊົດໃຊ້ຂອງພະເຢຊູຄຣິດ. ພະກິດຕິຄຸນຮ່ວມດ້ວຍຄວາມຈິງນິລັນດອນ ຫລື ກົດ, ພັນທະສັນຍາ, ແລະພິທີການຕ່າງໆ ທີ່ຈຳເປັນສຳລັບມະນຸດເພື່ອຈະກັບຄືນໄປສູ່ທີ່ປະທັບຂອງພະເຈົ້າ.
- **ພະຄຸນ:** ອຳນາດຈາກພະເຢຊູຄຣິດ ເຊິ່ງປ່ອຍໃຫ້ເຮົາຮັບເອົາພອນໃນຊີວິດນີ້ ແລະ ໄດ້ຮັບຊີວິດນິລັນດອນ ແລະ ຄວາມສູງສົ່ງຫລັງຈາກເຮົາໃຊ້ສັດທາ, ກັບໃຈ, ແລະ ພະຍາຍາມຮັກສາພະບັນຍັດຢ່າງດີທີ່ສຸດແລ້ວ. ການຊ່ອຍເຫລືອ ຫລື ພະລັງຈາກສະຫວັນເຊັ່ນນັ້ນ ໄດ້ຖືກມອບໃຫ້ຜ່ານຄວາມເມດຕາ ແລະ ຄວາມຮັກຂອງພະເຢຊູຄຣິດ. ເຮົາທຸກຄົນຕ້ອງການພະຄຸນຂອງສະຫວັນ ເພາະການຕົກ ຂອງ ອາດາມ ແລະ ເພາະຄວາມອ່ອນແອຂອງເຮົາຄືກັນ.

ໝາຍເຫດ

- **ຄວາມເມດຕາ:** ວິນຍານແຫ່ງຄວາມເຫັນອົກເຫັນໃຈ, ຄວາມອ່ອນໂຍນ, ແລະ ການໃຫ້ອະໄພ. ຄວາມເມດຕາຄືໜຶ່ງໃນລັກສະນະຂອງພະເຈົ້າ. ພະເຢຊູຄິດມອບຄວາມເມດຕາຕໍ່ເຮົາຜ່ານການເສຍສະລະແຫ່ງການຊົດໃຊ້ໃນເງື່ອນໄຂຂອງການກັບໃຈ.

- **ການຄືນສະພາບເດີມ:** ການຄືນຂອງບາງສິ່ງທີ່ໄດ້ຖືກເອົາໄປ ຫລື ສູນຫາຍໄປ. ຕົວຢ່າງ, ການຟື້ນຟູພະກິດຕິຄຸນຖືກເອີ້ນວ່າ ການຕັ້ງຂຶ້ນໃໝ່ (ເບິ່ງ ກິດຈະການ 3:19–21). ຄຳວ່າ *ການຟື້ນຟູ* ໝາຍເຖິງຄວາມເປັນຄືນມາຈາກຕາຍຂອງຮ່າງກາຍຄືກັນ (ເບິ່ງ ແອລະມາ 41:10–15).

## ຄຳສັບອື່ນໆທີ່ທ່ານອາດຈະຕ້ອງແປຄວາມໝາຍເພີ່ມເຕີມສຳລັບຄົນທີ່ທ່ານສອນ

- ຖືກຊຳລະຈາກບາບ
- ການສາລະພາບ
- ການໃຫ້ອະໄພ
- ການອະທິຖານ
- ພິທີສິນລະລຶກ
- ທາງຊື່ ແລະ ແຄບ
- ການລໍ້ລວງ

ໝາຍເຫດ

# ພະບັນຍັດ

## *ການຕຽມຕົວສຳລັບການຮັບບັບຕິດສະມາ ແລະ ການຢືນຢັນ*



### ການສອນບົດຮຽນນີ້

ມີຫລາຍໆວິທີທີ່ຈະສອນພະບັນຍັດທີ່ມີໃນບົດຮຽນນີ້. ດັ່ງເຊັ່ນ, ທ່ານອາດຈະສອນພະບັນຍັດສອງສາມຂໍ້ຈາກບົດຮຽນນີ້ເປັນສ່ວນຂອງສາມບົດຮຽນທຳອິດ, ຫລື ທ່ານອາດຈະສອນພະບັນຍັດຫລາຍໆຂໍ້ພ້ອມກັນເປັນບົດຮຽນດຽວ. ສິ່ງທີ່ທ່ານເຮັດຄວນເປັນໄປຕາມຄວາມຕ້ອງການຂອງຜູ້ສົນໃຈ ແລະ ການຊີ້ນຳຈາກພະວິນຍານ.

## ຕຽມສອນ

ຈຸດປະສົງຂອງທ່ານໃນການສອນພະບັນຍັດຄື ຊ່ອຍໃຫ້ຄົນດຳລົງຊີວິດຕາມພະກິດຕິຄຸນໂດຍການໃຊ້ສັດທາໃນພະເຢຊູຄິດ ແລະ ກັບໃຈເມື່ອເຂົາເຈົ້າຕຽມຕົວສຳລັບການຮັບບັບຕິດສະມາ ແລະ ການຢືນຢັນ. ໂດຍການເຊື່ອຟັງພະບັນຍັດ, ຜູ້ຄົນຈະເຕີບໂຕໃນປະຈັກພະຍານເຖິງພະກິດຕິຄຸນ, ສະແດງວ່າເຂົາເຈົ້າມີ "ໃຈຊອກຊ້ຳ ແລະ ວິນຍານທີ່ສຳນຶກຜິດ," ແລະ ເລີ່ມທີ່ຈະກັບໃຈຈາກບາບທັງໝົດຂອງເຂົາເຈົ້າ (ເບິ່ງ ໂມໂລໄນ 6:1–4; D&C 20:37).

ບົດຮຽນນີ້ໄດ້ຖືກຈັດຂຶ້ນໃຫ້ແຕກຕ່າງກັນກັບສາມບົດຮຽນທຳອິດ. ສາມບົດຮຽນທຳອິດໄດ້ອະທິບາຍ ເຖິງພື້ນຖານຄຳສອນແຫ່ງພະກິດຕິຄຸນຂອງພະເຢຊູຄິດ. ບົດຮຽນນີ້ອະທິບາຍເຖິງພະບັນຍັດທີ່ພະເຈົ້າໄດ້ມອບໃຫ້ເພື່ອຊ່ອຍເຮົາໃຫ້ໃຊ້ຫລັກທຳພະກິດຕິຄຸນໃນຊີວິດຂອງເຮົາ.

ມີຫລາຍວິທີທີ່ຈະສອນບົດຮຽນນີ້. ວິທີທີ່ທ່ານເຮັດຄວນເປັນໄປຕາມຄວາມຕ້ອງການຂອງຜູ້ສົນໃຈ ແລະ ການຊີ້ນຳຈາກພະວິນຍານ. ຈົ່ງຄິດ ແລະ ອະທິຖານຕະຫລອດກ່ຽວກັບວິທີທີ່ຈະຊ່ອຍຜູ້ສົນໃຈ ໃຫ້ດຳລົງຊີວິດຕາມພະກິດຕິຄຸນ. ແນວຄິດເຫລົ່ານີ້ຮ່ວມດ້ວຍ:

- ສອນພະບັນຍັດຂໍ້ໜຶ່ງ ຫລື ຫລາຍກວ່ານັ້ນເປັນສ່ວນຂອງສາມບົດຮຽນທຳອິດ. ເມື່ອເວລາສອນ, ໃຫ້ພິຈາລະນາຫລັກທຳທີ່ສອນໃນ ແອລະມາ 12:32: "ພະເຈົ້າຈຶ່ງປະທານບັນຍັດໃຫ້ເຂົາ, *ຫລັງຈາກ* ເຮັດໃຫ້ເຂົາຮູ້ແຜນແຫ່ງການໄຖ່" (ຕົວອັກສອນເນີ້ງແມ່ນຖືກເພີ່ມໃສ່ຕື່ມ). ພະບັນຍັດບາງຂໍ້, ເຊັ່ນການອະທິຖານ ແລະ ການສຶກສາພະຄຳພີ, ອາດຈະສອນໄດ້ດີທີ່ສຸດໃຫ້ເປັນສ່ວນຂອງສາມບົດຮຽນທຳອິດ. ພະບັນຍັດຂໍ້ອື່ນໆອາດຈະສອນໄດ້ດີທີ່ສຸດຫລັງຈາກທ່ານໄດ້ວາງພື້ນຖານຄຳສອນຂອງພະກິດຕິຄຸນທີ່ມີໃນສາມບົດຮຽນທຳອິດແລ້ວ.
- ການສອນພະບັນຍັດສອງສາມຂໍ້ເປັນບົດຮຽນດຽວ.

ໝາຍເຫດ

- ການສອນພະບັນຍັດຂໍ້ດຽວເປັນບົດຮຽນໜຶ່ງ.
- ການສອນພະບັນຍັດໃນຄວາມໝາຍຂອງພະກິດຕິຄຸນ. ທົບທວນບົດຮຽນກ່ຽວກັບພະກິດຕິຄຸນຂອງພະເຢຊູຄຣິດໜ້ອຍໜຶ່ງກ່ອນຈະສອນພະບັນຍັດຂໍ້ໜຶ່ງ ຫລື ຫລາຍຂໍ້. ເມື່ອທ່ານເຮັດແບບນັ້ນ, ທ່ານຈະສາມາດຊ່ອຍຜູ້ສົນໃຈໃຫ້ເຫັນວ່າພະບັນຍັດເໝາະສົມແນວໃດໃນການເບິ່ງກວ້າງອອກໄປຂອງການໃຊ້ສັດທາໃນພະຜູ້ຊ່ອຍໃຫ້ລອດ ແລະ ການກັບໃຈເພື່ອຕຽມຕົວຮັບບັບຕິສະມາ ແລະ ການຢືນຢັນ. ເຂົາເຈົ້າສາມາດໄດ້ຮັບພອນໃນຊີວິດຂອງເຂົາເຈົ້າເມື່ອເຂົາເຈົ້າເຫັນພະກິດຕິຄຸນຂອງພະເຢຊູຄຣິດເປັນແບບແຜນຂອງການດຳລົງຊີວິດ.

ທ່ານອາດຈະສາມາດສອນຜູ້ສົນໃຈບາງຄົນໂດຍການຢ້ຽມຢາມສອງສາມເທື່ອ; ບາງຄົນອື່ນອາດຈະຕ້ອງໄດ້ຢ້ຽມຢາມຫລາຍເທື່ອກວ່ານັ້ນ. ທ່ານສາມາດດັດແປງວິທີທ່ານສອນບົດຮຽນເປັນວິທີໃດກໍໄດ້ ທີ່ຈະຊ່ອຍໃຫ້ຜູ້ສົນໃຈຕຽມຕົວຢ່າງຮຽບຮ້ອຍເພື່ອຮັບບັບຕິສະມາ ແລະ ການຢືນຢັນ. ເປົ້າໝາຍຂອງທ່ານບໍ່ພຽງແຕ່ສອນບົດຮຽນເທົ່ານັ້ນ; ແຕ່ແມ່ນເພື່ອຊ່ອຍຄົນອື່ນໃຫ້ມາສູ່ພະຄຣິດຜ່ານການມີສັດທາໃນພະເຢຊູຄຣິດ, ການກັບໃຈ, ການຮັບບັບຕິສະມາ, ການຮັບເອົາພະວິນຍານບໍລິສຸດ, ແລະ ການອົດທົນຈົນເຖິງທີ່ສຸດ.

ການສອນບົດຮຽນຄວນຈະບໍ່ໃຫ້ກາຍ 45 ນາທີ. ບາງທີ່ທ່ານຈະເຫັນວ່າມີເວລາສອນບົດຮຽນໜ້ອຍດຽວເທົ່ານັ້ນ. ຖ້າເປັນເຊັ່ນນັ້ນ, ທ່ານອາດຈະຕ້ອງໄປຢ້ຽມຢາມຫລາຍເທື່ອ ແລະ ດັດແປງບົດຮຽນທີ່ສອນໃຫ້ສັ້ນລົງ.

ມີຫລາຍວິທີທີ່ທ່ານອາດຈະສອນບົດຮຽນນີ້ໄດ້. ທ່ານຄວນພິຈາລະນາເຖິງຄວາມຕ້ອງການຂອງຜູ້ສົນໃຈ ແລະ ຮັບການຊີ້ນຳຈາກພະວິນຍານ ເພື່ອຈະໄດ້ຕັດສິນໃຈຢ່າງດີທີ່ສຸດວ່າ ທ່ານຈະສອນພະບັນຍັດຂໍ້ໃດ, ທ່ານຈະສອນເມື່ອໃດ, ແລະ ຈະໃຊ້ເວລາດົນປານໃດ.

## ຮຽນຮູ້ກ່ຽວກັບພະບັນຍັດ ແລະ ຄຳໝັ້ນສັນຍາ

ເມື່ອທ່ານສຶກສາບົດຮຽນນີ້, ຈົ່ງເຮັດຕາມແບບແຜນຂ້າງລຸ່ມນີ້:

- ສຶກສາສ່ວນທີ່ອະທິບາຍເຖິງພະບັນຍັດຂໍ້ທີ່ທ່ານຈະສອນ ແລະ ຂຽນແຜນບົດຮຽນທີ່ງ່າຍ ທີ່ມີຈຸດສຳຄັນສາມຫາຫ້າຂໍ້.
- ໃຫ້ຝຶກສອນກັບຄູ່ຜູ້ສອນສາດສະໜາຂອງທ່ານປະມານສອງຫລືສາມນາທີ. ຝຶກຝົນວິທີທີ່ທ່ານຈະເຊື້ອເຊີນໃຫ້ຜູ້ສົນໃຈເຮັດຄຳໝັ້ນສັນຍາ ແລະ ວິທີທີ່ທ່ານຈະແກ້ໄຂບັນຫາ.
- ສົນທະນາວິທີທີ່ຈະຊ່ອຍຜູ້ສົນໃຈໃຫ້ຮັກສາຄຳໝັ້ນສັນຍາເຊິ່ງເຂົາໄດ້ຍອມຮັບແລ້ວ.

## ການເຊື່ອຟັງ

ພະເຈົ້າມອບພະບັນຍັດໃຫ້ເຮົາເພື່ອເປັນປະໂຫຍດຕໍ່ເຮົາ. ພະບັນຍັດແມ່ນຄຳສອນຈາກພະບິດາຜູ້ສະຖິດໃນສະຫວັນທີ່ຮັກຂອງເຮົາ ເພື່ອຊ່ອຍເຮົາໃຫ້ມີຄວາມສຸກໃນຊີວິດ. ພະອົງຍັງໄດ້ມອບສິດທິແກ່ເຮົາອີກ, ເຊິ່ງແມ່ນຄວາມສາມາດ ແລະ ໂອກາດທີ່ຈະເລືອກລະຫວ່າງຄວາມດີ ແລະ ຄວາມຊົ່ວ. ເມື່ອເຮົາເຊື່ອຟັງພະເຈົ້າ, ເຮົາໄດ້ເຮັດຕາມອິດທິພົນຂອງພະວິນຍານ ແລະ ເລືອກທີ່ຈະປະຕິບັດຕາມຄວາມປະສົງຂອງພະອົງ. ການເຊື່ອຟັງພະບັນຍັດ ນຳຄວາມສະຫງົບມາສູ່ເຮົາໃນຊີວິດນີ້ ແລະ ຊີວິດນິລັນດອນໃນໂລກທີ່ຈະມາເຖິງ. ການເຊື່ອຟັງສະແດງເຖິງຄວາມຮັກຂອງເຮົາຕໍ່ພະເຈົ້າ. ການບໍ່ເຊື່ອຟັງນຳຄວາມໂສກເສົ້າມາສູ່ເຮົາ.

ພະບິດາເທິງສະຫວັນຮູ້ຈັກຄວາມອ່ອນແອຂອງເຮົາ ແລະ ມີຄວາມອົດທົນນຳເຮົາ. ພະອົງໃຫ້ພອນເຮົາເມື່ອເຮົາພະຍາຍາມເຊື່ອຟັງພະບັນຍັດຂອງພະອົງ. ພະອົງຫວັງໃຫ້ເຮົາເຊື່ອຟັງພະອົງ ເພື່ອພະອົງຈະສາມາດໃຫ້ພອນເຮົາ.

### ການສຶກສາພະຄຳພີ

**ສິດທິ**

| | | |
|---|---|---|
| 2 ນີໄຟ 2:26–29 | D&C 58:26–29 | Topical Guide, "Agency" |
| ແອລະມາ 12:31 | D&C 82:8–10 | |

ບົດຮຽນທີ 4:
ພະບັນຍັດ

ໝາຍເຫດ

**ການເຊື່ອຟັງ**

| | | |
|---|---|---|
| D&C 130:20–21 | ໂຢຮັນ 14:15, 21 | ປັນຍາຈານ 12:13 |

**ຄຳໝັ້ນສັນຍາ**

- ທ່ານຈະເຊື່ອຟັງກົດຂອງພະເຈົ້າບໍ?

## ອະທິຖານເປັນປະຈຳ

ພະເຈົ້າບັນຊາເຮົາໃຫ້ອະທິຖານຫາພະອົງ. ທ່ານສາມາດອະທິຖານເວລາໃດກໍໄດ້ ແລະ ບ່ອນໃດກໍໄດ້. ພະຜູ້ເປັນເຈົ້າໄດ້ສອນເຮົາໃຫ້ຄຸເຂົ່າລົງ ແລະ ອະທິຖານໃນຕອນເຊົ້າ ແລະ ຕອນກາງຄືນ, ອະທິຖານຄົນດຽວ ຫລື ນຳຄອບຄົວຂອງເຮົາ. ພະບິດາເທິງສະຫວັນຂອງເຮົາໄດ້ຍິນ ແລະ ຕອບຄຳອະທິຖານຂອງເຮົາ. ຜ່ານການອະທິຖານປະຈຳວັນ ເຮົາຈະໄດ້ຮັບພອນ ແລະ ການນຳພາອັນສັກສິດ. ເຮົາຄວນອະທິຖານດ້ວຍຄວາມຈິງໃຈຕະຫລອດເວລາ. ເຮົາກໍຄວນອະທິຖານດ້ວຍ "ເຈດຕະນາອັນແທ້ຈິງ," ນຳອີກ ເຊິ່ງໝາຍຄວາມວ່າ ເຮົາສັນຍາທີ່ຈະເຮັດຕາມຄຳຕອບທີ່ເຮົາໄດ້ຮັບ.

ເຮົາອະທິຖານດ້ວຍສັດທາຕໍ່ພະບິດາຜູ້ສະຖິດໃນສະຫວັນຂອງເຮົາໃນພະນາມຂອງພະເຢຊູຄຣິດ (see Moses 5:8). ເພາະພະອົງຄືພະບິດາຂອງເຮົາ ແລະ ເຮົາເປັນລູກຂອງພະອົງ, ພະອົງຈະຕອບຄຳອະທິຖານຂອງເຮົາ. ເຮົາເລີ່ມຕົ້ນການອະທິຖານໂດຍການກ່າວເຖິງພະບິດາຜູ້ສະຖິດໃນສະຫວັນຂອງເຮົາ. ເຮົາຈົບການອະທິຖານຂອງເຮົາໂດຍການກ່າວວ່າ, "ໃນພະນາມຂອງພະເຢຊູຄຣິດ, ອາແມນ."

ໃນການອະທິຖານ ເຮົາເວົ້າຢ່າງເປີດໃຈ ແລະ ຢ່າງສັດຊື່ນຳພະບິດາຜູ້ສະຖິດໃນສະຫວັນທີ່ຮັກຂອງເຮົາ. ເຮົາສະແດງຄວາມຮູ້ບຸນຄຸນ ແລະ ຄວາມຂອບພະໄທສຳລັບພອນຂອງເຮົາ. ເຮົາອາດກ່າວເຖິງຄວາມຮັກຂອງເຮົາຕໍ່ພະອົງ. ນອກຈາກນັ້ນແລ້ວ ເຮົາອາດຈະຂໍຮ້ອງ ເພື່ອການຊ່ອຍເຫລືອ, ການປ້ອງກັນ, ແລະ ການນຳທາງຕາມຄວາມຕ້ອງການຂອງເຮົາ.

ເມື່ອເຮົາອະທິຖານດ້ວຍສັດທາ, ດ້ວຍຄວາມຈິງໃຈ, ແລະ ດ້ວຍເຈດຕະນາອັນແທ້ຈິງ, ເຮົາຈະເຫັນອິດທິພົນຂອງພະເຈົ້າໃນຊີວິດຂອງເຮົາ. ພະອົງຈະນຳພາເຮົາໃນຊີວິດປະຈຳວັນ ແລະ ຊ່ອຍເຮົາເຮັດການຕັດສິນໃຈທີ່ດີ. ພະອົງຈະໃຫ້ພອນເຮົາດ້ວຍຄວາມຮູ້ສຶກປອບໂຍນ ແລະ ສະຫງົບ. ພະອົງຈະເຕືອນເຮົາກ່ຽວກັບອັນຕະລາຍ ແລະ ເຮັດໃຫ້ເຮົາເຂັ້ມແຂງເພື່ອຕໍ່ຕ້ານການລໍ້ລວງໄດ້. ພະອົງຈະໃຫ້ອະໄພບາບຂອງເຮົາ. ເຮົາຈະມີຄວາມຮູ້ສຶກໃກ້ຊິດພະອົງຫລາຍຂຶ້ນ. ເຮົາຕ້ອງຮຽນຈື່ອິດທິພົນຂອງພະອົງໃນຊີວິດຂອງເຮົາ. ເຮົາຕ້ອງຮຽນຟັງສຽງເບົາ ແລະ ຄ່ອຍຂອງພະວິນຍານ.

ເຮົາສາມາດຮູ້ຈັກເມື່ອພະວິນຍານບໍລິສຸດໄດ້ສອນເຮົາກ່ຽວກັບຄວາມຈິງ. ຄວາມຄິດຂອງເຮົາຈະເຕັມໄປດ້ວຍການດົນໃຈ ແລະ ຄວາມຄິດທີ່ເບີກບານ. ເຮົາຈະໄດ້ຮັບການສິດສອນ, ຫລື ໄດ້ຮັບຄວາມຮູ້ໃໝ່. ຫົວໃຈຂອງເຮົາຈະມີຄວາມຮູ້ສຶກສະຫງົບ, ຊຸ່ມຊື່ນ, ແລະ ຄວາມຮັກ. ເຮົາຈະປາກເຮັດສິ່ງທີ່ດີ ແລະ ປາກຊ່ອຍເຫລືອຄົນອື່ນໆ. ຄວາມຮູ້ສຶກເຫລົ່ານີ້ເປັນການຍາກທີ່ຈະອະທິບາຍໄດ້ ແຕ່ເຮົາສາມາດຮູ້ຈັກເມື່ອເຮົາມີປະສົບການກັບສິ່ງເຫລົ່ານີ້.

**ການສຶກສາພະຄຳພີ**

| | | |
|---|---|---|
| 2 ນີໄຟ 32:8–9 | D&C 6:22–23 | D&C 19:28 |
| ອີນັດ 1:1–12 | D&C 8:2–3 | 1 ກະສັດ 19:11–12 |
| ແອລະມາ 34:17–28 | D&C 9:7–9 | Bible Dictionary, "Prayer" |
| ໂມໂລໄນ 10:3–5 | | |

**ຄຳໝັ້ນສັນຍາ**

- ທ່ານຈະຄຸເຂົ່າ ແລະ ອະທິຖານເປັນສ່ວນຕົວ ແລະ ເປັນຄອບຄົວທຸກໆວັນບໍ?

ໝາຍເຫດ

## ສຶກສາພະຄຳພີ

ພະຄຳພີແມ່ນບັນທຶກຂຽນກ່ຽວກັບການຕິດຕໍ່ຂອງພະເຈົ້ານຳລູກໆຂອງພະອົງ ເຊິ່ງໄດ້ຖືກບັນທຶກໄວ້ໂດຍສາດສະດາທັງຫລາຍພາຍໃຕ້ອິດທິພົນຂອງພະວິນຍານບໍລິສຸດ. ເຮົາສະແດງສັດທາຂອງເຮົາໂດຍການສຶກສາ, ການມີຄວາມເຊື່ອ, ແລະ ການເຊື່ອຟັງພະຄຳທີ່ພະເຈົ້າໄດ້ເປີດເຜີຍໄວ້. ເຮົາຄົ້ນຄວ້າພະຄຳພີ ຢ່າງພາກພຽນ ເພື່ອຈະເຂົ້າໃຈຄວາມຈິງ. ເຮົາຊື່ນຊົມໃນພະຄຳພີ ເພາະພະຄຳພີເປີດປະຕູສູ່ການເປີດເຜີຍ ແລະ ສະແດງຕໍ່ເຮົາສິ່ງທີ່ເຮົາຕ້ອງເຮັດ ແລະ ຄົນທີ່ເຮົາຈະເປັນ. ເຮົາຄົ້ນຄວ້າພະຄຳພີເພື່ອຮຽນຮູ້ກ່ຽວກັບພະເຢຊູຄຣິດ ແລະ ພະກິດຕິຄຸນຂອງພະອົງ. ສັດທາໃນພະເຢຊູຄຣິດເປັນຂອງປະທານຈາກພະເຈົ້າທີ່ເກີດຂຶ້ນຜ່ານການສຶກສາ ແລະ ດຳລົງຊີວິດຕາມພະຄຳ ແລະ ພະກິດຕິຄຸນຂອງພະອົງ. ພະຄຳພີທີ່ສາດສະໜາຈັກອະນຸຍາດໃຫ້ໃຊ້ ເອີ້ນວ່າ "ພະຄຳພີມາດຕະຖານ," ແມ່ນ ພະຄຳພີໄບເບິ້ນ, ພະຄຳພີມໍມອນ, Doctrine and Covenants (ຄຳສອນ ແລະ ພັນທະສັນຍາ), ແລະ Pearl of Great Price (ໄຂ່ມຸກອັນລ້ຳຄ່າ). ເຮົາຄວນສຶກສາພະຄຳພີສັກສິດເຫລົ່ານີ້ທຸກໆວັນ.

### ການສຶກສາພະຄຳພີ

| | | |
|---|---|---|
| 1 Nephi 19:22–23 | 2 ນີໄຟ 31:19–20 | ໂຢຮັນ 20:31 |
| 2 ນີໄຟ 9:50–51 | 2 ນີໄຟ 31:3–5 | 2 ຕີໂມທີ 3:14–17 |
| 2 Nephi 25:26 | ແອລະມາ 32:28–30 | 2 ເປໂຕ 1:20–21 |
| 2 ນີໄຟ 29:1–13 | ໂຢຮັນ 5:39 | |

### ຄຳໝັ້ນສັນຍາ

- ທ່ານຈະອ່ານພະຄຳພີເປັນສ່ວນຕົວ ແລະ ເປັນຄອບຄົວທຸກໆວັນບໍ?

## ຮັກສາວັນຊະບາໂຕໃຫ້ສັກສິດ

ການປະພຶດຂອງເຮົາໃນວັນຊະບາໂຕ ສະທ້ອນເຖິງຄຳໝັ້ນສັນຍາຂອງເຮົາທີ່ຈະໃຫ້ກຽດ ແລະ ນະມັດສະການພະເຈົ້າ. ໂດຍການຮັກສາວັນຊະບາໂຕໃຫ້ສັກສິດ ເຮົາໄດ້ສະແດງຕໍ່ພະເຈົ້າເຖິງຄວາມເຕັມໃຈຂອງເຮົາທີ່ຈະຮັກສາພັນທະສັນຍາຂອງເຮົາ. ແຕ່ລະວັນຊະບາໂຕ ເຮົາຈະໄປບ້ານຂອງພະຜູ້ເປັນເຈົ້າ ເພື່ອນະມັດສະການພະອົງ. ຂະນະທີ່ເຮົາຢູ່ຫັ້ນ ເຮົາໄດ້ຮັບເອົາສິນລະລຶກເພື່ອລະນຶກເຖິງພະເຢຊູຄຣິດ ແລະ ການຊົດໃຊ້ຂອງພະອົງ. ເຮົາຕໍ່ພັນທະສັນຍາຂອງເຮົາ ແລະ ສະແດງວ່າເຮົາເຕັມໃຈທີ່ຈະກັບໃຈຈາກບາບ ແລະ ຄວາມຜິດຂອງເຮົາ.

ໃນວັນນີ້, ເຮົາຊື່ນຊົມກັບການພັກຜ່ອນຈາກວຽກງານ. ເມື່ອເຮົາເຂົ້າຮ່ວມການປະຊຸມຂອງສາດສະໜາຈັກ ແລະ ນະມັດສະການຮ່ວມກັນ, ເຮົາໄດ້ເພີ່ມຄວາມເຂັ້ມແຂງໃຫ້ກັນແລະກັນ. ເຮົາໄດ້ຮັບກຳລັງໃໝ່ໂດຍການຄົບຫານຳໝູ່ເພື່ອນ ແລະ ຄອບຄົວ. ສັດທາຂອງເຮົາໄດ້ເຂັ້ມແຂງຂຶ້ນເມື່ອເຮົາສຶກສາພະຄຳພີ ແລະ ຮຽນຮູ້ກ່ຽວກັບພະກິດຕິຄຸນທີ່ຖືກຟື້ນຟູຄືນມາໃໝ່ຫລາຍຂຶ້ນ.

ເມື່ອສັງຄົມ ຫລື ປະເທດຊາດບໍ່ສົນໃຈກິດຈະກຳໃນວັນຊະບາໂຕຫລາຍຂຶ້ນ, ຊີວິດກ່ຽວກັບທາງສາດສະໜາຈະເສື່ອມໂຊມລົງ ແລະ ທຸກໆພາກສ່ວນຂອງຊີວິດຈະຖືກກະທົບກະເທືອນໄປໃນທາງທີ່ບໍ່ດີ. ພອນທີ່ພົວພັນນຳການຮັກສາວັນຊະບາໂຕໃຫ້ສັກສິດຈະສູນຫາຍໄປ. ເຮົາຄວນຢຸດຈາກການຊື້ສິ່ງຂອງໃນວັນຊະບາໂຕ ແລະ ການມີສ່ວນຮ່ວມໃນການເຮັດກິດຈະກຳການຄ້າອື່ນໆ ແລະ ການຫລິ້ນກິລາ ທີ່ດຽວນີ້ຖືວ່າ ເປັນເລື່ອງທຳມະດາ ເຊິ່ງເປັນສິ່ງບໍ່ນັບຖືວັນຊະບາໂຕ.

ສິດທິຊົນຍຸກສຸດທ້າຍທັງຫລາຍຄວນຕັ້ງວັນສັກສິດນີ້ໄວ້ ຈາກການເຮັດກິດຈະກຳຕ່າງໆຂອງໂລກ ໂດຍກ້າວເຂົ້າສູ່ວິນຍານຂອງການນະມັດສະການ, ການສະແດງຄວາມຂອບພະໄທ, ການຮັບໃຊ້, ແລະ ການເຮັດກິດຈະກຳທີ່ມີຄອບຄົວເປັນສູນກາງ ທີ່ເໝາະສົມຕໍ່ວັນຊະບາໂຕ. ເມື່ອສະມາຊິກຂອງສາດສະໜາຈັກພະຍາຍາມທີ່ຈະເຮັດກິດຈະກຳຂອງວັນຊະບາໂຕໃຫ້ເຂົ້າກັບຄວາມຕັ້ງໃຈ ແລະ ຕາມພະວິນຍານຂອງພະຜູ້ເປັນເຈົ້າ, ແລ້ວຊີວິດຂອງເຂົາເຈົ້າຈະເຕັມໄປດ້ວຍຄວາມຊື່ນຊົມ ແລະ ຄວາມສະຫງົບ.

ໝາຍເຫດ

### ການສຶກສາພະຄຳພີ

3 ນີໄຟ 18:1–25 | ອົບພະຍົບ 20:8–11 | ເອຊາຢາ 58:13–14
D&C 59:9–15 | ອົບພະຍົບ 31:12–17

### ນັ່ງນຳຜູ້ສົນໃຈ ຫລື ສະມາຊິກຢູ່ໂບດ

ໃນກອງປະຊຸມສິນລະລຶກ ຫລື ກອງປະຊຸມສະເຕກ, ຜູ້ສອນສາດສະໜາທັງຄູ່ຄວນນັ່ງນຳຜູ້ສົນໃຈ, ຜູ້ປ່ຽນໃຈເຫລື້ອມໃສໃນບໍ່ດົນມານີ້, ຫລື ສະມາຊິກ. ເຂົາເຈົ້າບໍ່ຄວນນັ່ງນຳຜູ້ສອນສາດສະໜາຄົນອື່ນໆ.

### ຄຳໝັ້ນສັນຍາ

- ທ່ານຈະຮັກສາວັນຊະບາໂຕໃຫ້ສັກສິດບໍ?
- ທ່ານຈະຕຽມຕົວເພື່ອຮັບສິນລະລຶກຢ່າງມີຄ່າຄວນບໍ?

**ຄຳຖາມສຳລັບການສຳພາດກ່ອນບັບຕິສະມາກ່ຽວກັບບົດຮຽນນີ້**

- ທ່ານເຂົ້າໃຈຫຍັງແດ່ກ່ຽວກັບວັນຊະບາໂຕ, ຮ່ວມດ້ວຍການຮັບສິນລະລຶກທຸກອາທິດ ແລະ ການຮັບໃຊ້ຄົນອື່ນ? ທ່ານຈະເຕັມໃຈເຊື່ອຟັງກົດນີ້ [ກ່ອນທ່ານຮັບບັບຕິສະມາ] ບໍ?

## ບັບຕິສະມາ ແລະ ການຢືນຢັນ

ວິທີທີ່ເຮົາຈະສະແດງຄວາມປາດຖະໜາທີ່ຈະເຮັດຕາມວິທີທາງຂອງພະເຈົ້າຄືຜ່ານການຮັບພິທີບັບຕິສະມາ ແລະ ການຢືນຢັນ. ເມື່ອເຮົາໄດ້ຮັບບັບຕິສະມາ ແລະ ການຢືນຢັນ, ເຮົາໄດ້ເຮັດພັນທະສັນຍານຳພະເຈົ້າວ່າເຮົາຮັບເອົາພະນາມຂອງພະເຢຊູຄຣິດ ແລະ ເຮົາຈະລະນຶກເຖິງພະອົງຕະຫລອດເວລາ ແລະ ຮັກສາພະບັນຍັດຂອງພະອົງ. ເຮົາໄດ້ສັນຍາຕື່ມອີກວ່າ ເຮົາຈະຢືນເປັນພະຍານຂອງພະເຈົ້າທຸກເວລາ ແລະ ຊ່ອຍເຫລືອຄົນທີ່ຕ້ອງການຄວາມຊ່ອຍເຫລືອ (ເບິ່ງ ໂມໄຊຢາ 18:8–9). ແລ້ວພະເຈົ້າໄດ້ສັນຍາວ່າ ພະອົງຈະມອບພະວິນຍານບໍລິສຸດໃຫ້ເປັນເພື່ອນໃກ້ຊິດເຮົາ, ຈະອະໄພບາບໃຫ້ເຮົາ, ແລະ ໃຫ້ເຮົາໄດ້ເກີດໃໝ່.

### ຄຳໝັ້ນສັນຍາ

- ທ່ານຈະຮັບບັບຕິສະມາ ແລະ ການຢືນຢັນບໍ?
- ທ່ານຈະເຊື້ອເຊີນໝູ່ເພື່ອນ ແລະ ຍາດຕິພີ່ນ້ອງຂອງທ່ານໃຫ້ມາຮ່ວມພິທີບັບຕິສະມາບໍ? ຖ້າເປັນໄປໄດ້, ໃຫ້ເຊື້ອເຊີນຜູ້ສົນໃຈໃຫ້ໄປຮ່ວມພິທີບັບຕິສະມາ ແລະ ກອງປະຊຸມສິນລະລຶກ ຕອນທີ່ຜູ້ໃດຜູ້ໜຶ່ງຮັບການຢືນຢັນ.

**ຄຳຖາມສຳລັບການສຳພາດກ່ອນບັບຕິສະມາກ່ຽວກັບບົດຮຽນນີ້**

- ຄຳຖາມສຳລັບການສຳພາດກ່ອນບັບຕິສະມາທຸກຂໍ້.

### ເຊື້ອເຊີນໃຫ້ຮັບບັບຕິສະມາ

ການເຊື້ອເຊີນໃຫ້ຮັບບັບຕິສະມາ ແລະ ຮັບການຢືນຢັນ ຄວນຈະແຈ່ມແຈ້ງ ແລະ ໂດຍກົງ: "ທ່ານຈະເຮັດຕາມຕົວຢ່າງຂອງພະເຢຊູຄຣິດໂດຍການຮັບບັບຕິສະມາຈາກຄົນຜູ້ໜຶ່ງທີ່ມີອຳນາດຖານະປະໂລຫິດຂອງພະເຈົ້າບໍ? ເຮົາຈະມີພິທີບັບຕິສະມາໃນ (ວັນທີ). ທ່ານຈະຕຽມຕົວເພື່ອຮັບບັບຕິສະມາໃນວັນນັ້ນບໍ?"

ໝາຍເຫດ

## ເຮັດຕາມສາດສະດາ

ຄວາມຈິງຄືຄວາມຮູ້ເຖິງສິ່ງຕ່າງໆທີ່ມັນເປັນຢູ່, ດັ່ງທີ່ມັນເປັນມາ, ແລະ ດັ່ງທີ່ມັນຈະມາເຖິງ. ມັນບໍ່ປ່ຽນນຳສະພາບການ ແລະ ເວລາ. ຄວາມຈິງແມ່ນຄວາມຈິງໃນທຸກໆສະໄໝ ແລະ ວັດທະນະທຳ. ພະເຈົ້າຄືແຫລ່ງຂອງຄວາມຈິງທັງໝົດ. ເຮົາສາມາດມີສັດທາໃນພະອົງໄດ້ ເພາະເຮົາຮູ້ວ່າພະອົງຈະສອນເຮົາເຖິງຄວາມຈິງເທົ່ານັ້ນ. ພະເຈົ້າຕ້ອງການໃຫ້ລູກໆຂອງພະອົງທັງໝົດຮູ້ຄວາມຈິງ. ເພາະສະນັ້ນ, ພະອົງຈຶ່ງໄດ້ເປີດເຜີຍຄວາມຈິງທີ່ຈຳເປັນສຳລັບຄວາມລອດຜ່ານສາດສະດາ ແລະ ອັກຄະສາວົກ. ພະອົງໄດ້ເປີດເຜີຍຄວາມຈິງຕໍ່ເຮົາດ້ວຍຕົວເອງຜ່ານພະຄຳພີ ແລະ ການເປີດເຜີຍສ່ວນຕົວ.

ສາດສະດາໄດ້ຖືກເອີ້ນ ແລະ ຖືກເລືອກໂດຍພະເຈົ້າ ແລະ ເປັນຄົນທີ່ຊອບທຳດ້ວຍສັດທາອັນຍິ່ງໃຫຍ່. ພະຜູ້ເປັນເຈົ້າໄດ້ເປີດເຜີຍຄວາມຈິງຕໍ່ສາດສະດາຜ່ານພະວິນຍານບໍລິສຸດ. ພະອົງໄດ້ບັນຊາສາດສະດາຂອງພະອົງໃຫ້ສອນຄວາມຈິງໃຫ້ຜູ້ຄົນທັງໝົດ. ຜູ້ທີ່ເຊື່ອພະຄຳຂອງພະເຈົ້າດັ່ງທີ່ຖືກເປີດເຜີຍຜ່ານສາດສະດາຂອງພະອົງ ຈະໄດ້ຮັບພອນ.

ສາດສະໜາຈັກຂອງພະຄຣິດໄດ້ຖືກສ້າງຂຶ້ນເທິງພື້ນຖານຂອງອັກຄະສາວົກ ແລະ ສາດສະດາ, ຜູ້ທີ່ນຳພາສາດສະໜາຈັກດ້ວຍການເປີດເຜີຍ. ພະຜູ້ເປັນເຈົ້າໄດ້ເອີ້ນ ໂຈເຊັບ ສະມິດ ໃຫ້ມາເປັນສາດສະດາຄົນທຳອິດ ແລະ ເປັນຫົວໜ້າຂອງສະໄໝສຸດທ້າຍນີ້. ຜູ້ດຳລົງຕຳແໜ່ງຕໍ່ຈາກໂຈເຊັບ ສະມິດ ຜູ້ທີ່ນຳພາສາດສະໜາຈັກຂອງພະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍໃນປະຈຸບັນນີ້ຄືສາດສະດາ ແລະ ອັກຄະສາວົກຄືກັນ. ປະທານຂອງສາດສະໜາຈັກໃນປະຈຸບັນນີ້ຄືສາດສະດາທີ່ມີຊີວິດຢູ່. ເຮົາຕ້ອງມີສັດທາໃນສາດສະດາທີ່ພະເຈົ້າເລືອກໄວ້, ຕ້ອງເຊື່ອໝັ້ນເຖິງການເອີ້ນທີ່ສັກສິດຂອງເພິ່ນ, ແລະ ເຮັດຕາມຄຳສອນຂອງເພິ່ນ.

ເຮົາມີໂອກາດສະໜັບສະໜູນຜູ້ນຳຂອງສາດສະໜາຈັກຢ່າງເປີດເຜີຍເປັນປະຈຳ. *ສະໜັບສະໜູນ* ໝາຍຄວາມວ່າ ຊຸກຍູ້ ເຮົາຕ້ອງຕຽມຕົວເຮົາເພື່ອວ່າເມື່ອສາດສະດາ ແລະ ອັກຄະສາວົກບອກສອນ, ພະວິນຍານບໍລິສຸດຈະສາມາດຢືນຢັນເຖິງຄວາມຈິງທີ່ພວກເພິ່ນສອນ, ແລະ ຕໍ່ມາເຮົາສາມາດວາງແຜນເຮັດຕາມຄຳແນະນຳທີ່ພວກເພິ່ນໄດ້ໃຫ້ຕໍ່ເຮົາ.

ຜູ້ທີ່ຟັງ ແລະ ເຮັດຕາມຄຳສັ່ງສອນຂອງສາດສະດາ ແລະ ອັກຄະສາວົກທີ່ມີຊີວິດຢູ່ ຈະບໍ່ອອກນອກທາງ. ຄຳສອນຂອງສາດສະດາທີ່ມີຊີວິດຢູ່ ໄດ້ໃຫ້ຄວາມບໍ່ປ່ຽນແປງຂອງຄວາມຈິງນິລັນດອນໃນໂລກທີ່ສິນທຳບໍ່ໝັ້ນຄົງ ແລະ ຊ່ອຍເຮົາໃຫ້ໃຫ້ຫລີກລ້ຽງຈາກຄວາມເຈັບປວດ ແລະ ຄວາມເສຍໃຈ. ຄວາມສັບສົນ ແລະ ການຕໍ່ສູ້ກັນໃນໂລກຈະບໍ່ເກີດຄວາມໜັກໃຈຕໍ່ເຮົາ ແລະ ເຮົາຈະສາມາດຊື່ນຊົມກັບຄວາມໝັ້ນໃຈຂອງການມີຄວາມສອດຄ່ອງກັບຄວາມປະສົງຂອງພະເຈົ້າ.

### ການສຶກສາພະຄຳພີ

| | | |
|---|---|---|
| Mosiah 15:11–12 | D&C 21:1–7 | ເອເຟໂຊ 2:19–20 |
| Alma 13:1–16 | D&C 136:37–38 | ເອເຟໂຊ 4:11–14 |
| 3 ນີໄຟ 12:1–2 | ໂຢຮັນ 15:16 | ເຮັບເລີ 5:4 |
| D&C 1:37–38 | ກິດຈະການ 10:34–44 | ອາໂມດ 3:7 |

### ຄຳໝັ້ນສັນຍາ

- ທ່ານຢາກໄປພົບອະທິການບໍ?
- ທ່ານຈະສະໜັບສະໜູນ ແລະ ເຮັດຕາມຄຳສັ່ງສອນຂອງຜູ້ນຳໃນສາດສະໜາຈັກບໍ?

**ຄຳຖາມສຳລັບການສຳພາດກ່ອນບັບຕິດສະມາກ່ຽວກັບບົດຮຽນນີ້**

- ທ່ານເຊື່ອບໍ່ວ່າປະທານ [ປະທານຂອງສາດສະໜາຈັກໃນປະຈຸບັນ] ເປັນສາດສະດາຂອງພະເຈົ້າ? ນີ້ໝາຍຄວາມວ່າແນວໃດສຳລັບທ່ານ?

ໝາຍເຫດ

## ຮັກສາພະບັນຍັດສິບປະການ

ພະບິດາເທິງສະຫວັນໄດ້ມອບພະບັນຍັດໃຫ້ເຮົາ ເພື່ອວ່າເຮົາຈະຮູ້ສິ່ງທີ່ຄວນເຮັດ ແລະ ສິ່ງທີ່ຄວນຫລີກລ້ຽງ ເພື່ອຈະໄດ້ຮັບພອນທີ່ພະອົງຕ້ອງການມອບໃຫ້ເຮົາ (ຄວາມຊື່ນຊົມ, ຄວາມສະຫງົບໃນຄວາມນຶກຄິດ, ຄວາມສຸກທີ່ຍືນຍາວ). ພະເຈົ້າໄດ້ເປີດເຜີຍພະບັນຍັດສິບປະການຕໍ່ ໂມເຊ ເພື່ອຈະນຳພາຜູ້ຄົນຂອງພະອົງ:

- "ຢ່ານະມັດສະການພະອື່ນນອກຈາກເຮົາເທົ່ານັ້ນ" (ອົບພະຍົບ 20:3). "ພະ" ອື່ນຮ່ວມດ້ວຍ, ຊັບສົມບັດ, ອຳນາດ, ຫລື ຊື່ສຽງ.
- "ຢ່າເຮັດສຳລັບຕົນຮູບຢ່າງໃດຢ່າງໜຶ່ງ" (ອົບພະຍົບ 20:4).
- "ຢ່າໃຊ້ຊື່ຂອງເຮົາໄປໃນທາງຊົ່ວຮ້າຍ" (ອົບພະຍົບ 20:7).
- "ຈົ່ງຖືມື້ພະ [ວັນຊະບາໂຕ] ແລະ ຍຶດຖືໄວ້ເປັນມື້ສັກສິດ" (ອົບພະຍົບ 20:8).
- "ຈົ່ງນັບຖືພໍ່ແມ່ຂອງເຈົ້າ" (ອົບພະຍົບ 20:12).
- "ຢ່າຂ້າຄົນ" (ອົບພະຍົບ 20:13).
- "ຢູ່ຫລິ້ນຊູ້ສູ່ຜົວເມຍຜູ້ອື່ນ" (ອົບພະຍົບ 20:14).
- "ຢ່າລັກ" (ອົບພະຍົບ 20:15).
- "ຢ່າໃສ່ຮ້າຍປ້າຍສີເພື່ອນມະນຸດ" (ອົບພະຍົບ 20:16).
- "ຢ່າຢາກໄດ້ເຮືອນຊານບ້ານຊ່ອງຂອງຜູ້ອື່ນ" (ອົບພະຍົບ 20:17).

ພະບັນຍັດສິບປະການ ຍັງໃຊ້ໄດ້ຢູ່ໃນປະຈຸບັນນີ້. ພະບັນຍັດສອນເຮົາໃຫ້ນະມັດສະການ ແລະ ສະແດງມີຄວາມຄາລະວະຕໍ່ພະເຈົ້າ. ພະບັນຍັດກໍສອນເຮົາອີກເຖິງວິທີທີ່ຈະເຮັດຕໍ່ກັນແລະກັນ.

### ຢ່າມີພະເຈົ້າອົງອື່ນ

ຜູ້ຄົນໃນວັດທະນະທຳຕ່າງໆເປັນເຈົ້າຂອງ ຫລື ໃຫ້ຄວາມນັບຖືຕໍ່ສິ່ງຂອງທີ່ເຕືອນເຂົາເຈົ້າກ່ຽວກັບພະເຈົ້າ ຫລື ບັນພະບຸລຸດ. ບາງຄັ້ງສິ່ງຂອງເຫລົ່ານີ້, ດັ່ງເຊັ່ນ ຮູບປັ້ນ, ເຄື່ອງໝາຍທາງສາດສະໜາ, ຫລື ຮ້ານບູຊານ້ອຍ, ອາດຈະເປັນຈຸດສົນໃຈຂອງການນະມັດສະການຂອງເຂົາເຈົ້າຄືກັນ. ຊ່ອຍຜູ້ສົນໃຈໃຫ້ເຂົ້າໃຈວ່າ ພະຜູ້ເປັນເຈົ້າໄດ້ບັນຊາເຮົາບໍ່ໃຫ້ນະມັດສະການຮູບບູຊາຕ່າງໆ. ຊຸກຍູ້ເຂົາເຈົ້າໃຫ້ເອົາສິ່ງຂອງທີ່ ເຂົາເຈົ້ານະມັດສະການ ຫລື ສິ່ງທີ່ເຂົາເຈົ້າໄຫວ້ວອນ ອອກໄປຈາກບ້ານຂອງເຂົາເຈົ້າ. ຊ່ອຍເຂົາເຈົ້າໃຫ້ຮ່ວມຈຸດສົນໃຈຂອງເຂົາເຈົ້າໃນສັດທາ ແລະ ນະມັດສະການພະບິດາເທິງສະຫວັນຂອງເຂົາເຈົ້າ ແລະ ພະເຢຊູຄຣິດ. ສອນເຂົາເຈົ້າວ່າ ພະກິດຕິຄຸນຂອງພະເຢຊູຄຣິດທີ່ຖືກຟື້ນຟູຄືນມາໃໝ່ ແມ່ນເນັ້ນໜັກໃສ່ພະຄຣິດທີ່ມີຊີວິດຢູ່.

ໃນພະກິດຕິຄຸນທີ່ຖືກຟື້ນຟູຄືນມາໃໝ່ ພະຜູ້ເປັນເຈົ້າໄດ້ສອນເຮົາໃຫ້ຮູ້ວິທີທີ່ຈະຈື່ຈຳພະອົງ. ເຮົາຈື່ຈຳພະອົງຜ່ານການອະທິຖານ, ສິນລະລຶກ, ແລະ ການນະມັດສະການໃນພະວິຫານ. ປະທານເຜີຍແຜ່ຂອງທ່ານຈະໃຫ້ການຊີ້ນຳໃນສ່ວນພິເສດກ່ຽວກັບເລື່ອງນີ້.

### ການສຶກສາພະຄຳພີ

| | | |
|---|---|---|
| Mosiah 13 | ມັດທາຍ 22:36–40 | ຈົດເຊັນບັນຊີ 5:6–21 |
| D&C 59:5–6 | ອົບພະຍົບ 20:1–17 | |

### ຄຳໝັ້ນສັນຍາ

- ທ່ານຈະຮັກສາພະບັນຍັດສິບປະການນີ້ບໍ?

## ຮັກສາກົດພົມມະຈັນ

ພະເຈົ້າພໍພະໄທໃນພົມມະຈັນ ແລະ ກຽດຊັງບາບທາງເພດ. ພົມມະຈັນຮ່ວມດ້ວຍການອົດກັ້ນຢ່າງເຄັ່ງຄັດຈາກຄວາມສຳພັນທາງເພດກ່ອນແຕ່ງງານ ແລະ ຕ້ອງສັດຊື່ທັງໝົດ ແລະ ຈິງຮັກພັກດີຕໍ່ຄູ່ຄອງຫລັງຈາກແຕ່ງງານ. ຜູ້ທີ່ຮັກສາກົດພົມມະຈັນຈະຊື່ນຊົມນຳພະລັງທີ່ມາຈາກການຄວບຄຸມຕົວເອງໄດ້. ເຂົາເຈົ້າຈະຊື່ນຊົມກັບຄວາມໝັ້ນໃຈ ແລະ ຄວາມໄວ້ວາງໃຈໃນຄວາມສຳພັນຂອງຄອບຄົວຂອງເຂົາເຈົ້າ. ເຂົາເຈົ້າຈະສາມາດຊື່ນຊົມນຳອິດທິພົນຂອງພະວິນຍານບໍລິສຸດໃນຊີວິດຂອງເຂົາເຈົ້າຢ່າງສົມບູນຫລາຍຂຶ້ນ. ຜູ້ທີ່ບໍ່ເຮັດຕາມກົດນີ້ ຈະມີຄວາມຮູ້ສຶກອັບອາຍຍາວນານ ແລະ ຮູ້ສຶກຜິດທີ່ເປັນຄວາມໜັກໜ່ວງໃນຊີວິດຂອງເຂົາ.

ພົມມະຈັນຮຽກຮ້ອງການຄວາມສັດຊື່ໃນຄວາມຄິດ ແລະ ການກະທຳ. ເຮົາຕ້ອງຮັກສາຄວາມຄິດຂອງເຮົາໃຫ້ສະອາດ ແລະ ຮຽບຮ້ອຍໃນການນຸ່ງຖື, ຄຳເວົ້າ, ແລະ ການກະທຳ. ເຮົາຕ້ອງຫລີກລ້ຽງຮູບພາບລາມົກໃນທຸກຮູບແບບ. ເຮົາຄວນກະທຳຕໍ່ອຳນາດຂອງການເກີດທີ່ພະເຈົ້າມອບໃຫ້ ແລະ ຮ່າງກາຍຂອງເຮົາໃຫ້ສັກສິດ. ຜູ້ທີ່ຈະຮັບບັບຕິດສະມາຕ້ອງຮັກສາກົດພົມມະຈັນ, ເຊິ່ງໄດ້ຫ້າມບໍ່ໃຫ້ສຳພັນທາງເພດຕ່າງໆນອກການແຕ່ງງານທີ່ຖືກຕ້ອງຕາມກົດໝາຍລະຫວ່າງຊາຍ ແລະ ຍິງ. ເຂົາເຈົ້າຕ້ອງບໍ່ຮ່ວມໃນການເອົາລູກອອກ ຫລື ການຮ່ວມເພດລະຫວ່າງຄົນທີ່ມັກເພດດຽວກັນ. ຜູ້ທີ່ເຄີຍກະທຳບາບທາງເພດສາມາດກັບໃຈໄດ້ ແລະ ຈະໄດ້ຮັບການອະໄພ.

### ຄູ່ຮັກທີ່ຢູ່ນຳກັນ

ຊາຍ ແລະ ຍິງຜູ້ທີ່ຢູ່ນຳກັນແຕ່ຍັງບໍ່ທັນໄດ້ແຕ່ງງານ ຈະບໍ່ສາມາດຮັບບັບຕິດສະມາ ຍົກເວັ້ນແຕ່ເຂົາເຈົ້າຈະແຕ່ງງານ ຫລື ແຍກກັນກ່ອນ. ຄົນທີ່ແຕ່ງງານນຳຫລາຍກວ່າໜຶ່ງຄົນໃນເວລາດຽວກັນ ຈະບໍ່ສາມາດຮັບບັບຕິດສະມາ. ໃຫ້ຂໍຄຳແນະນຳຈາກປະທານເຜີຍແຜ່, ຜູ້ທີ່ຈະຊີ້ນຳທ່ານຢ່າງແຈ່ມແຈ້ງໃນແຕ່ລະກໍລະນີ.

### ການສຶກສາພະຄຳພີ

| | | |
|---|---|---|
| Jacob 2:28 | 3 ນີໄຟ 12:27–30 | ມັດທາຍ 5:27–28 |
| Mosiah 13:22 | D&C 42:22–24 | ໂລມ 1:26–32 |
| ແອລະມາ 39:3–5 | D&C 63:16 | ເອເຟໂຊ 5:3–5 |

### ຄຳໝັ້ນສັນຍາ

- ທ່ານຈະຮັກສາກົດພົມມະຈັນບໍ?

**ຄຳຖາມສຳລັບການສຳພາດກ່ອນບັບຕິດສະມາກ່ຽວກັບບົດຮຽນນີ້**

- ທ່ານເຂົ້າໃຈຫຍັງແດ່ກ່ຽວກັບກົດພົມມະຈັນ, ເຊິ່ງໄດ້ຫ້າມບໍ່ໃຫ້ສຳພັນທາງເພດຕ່າງໆນອກການແຕ່ງງານທີ່ຖືກຕ້ອງກົດໝາຍລະຫວ່າງຊາຍ ແລະ ຍິງ? ທ່ານເຕັມໃຈທີ່ຈະເຊື່ອຟັງກົດນີ້ [ກ່ອນທ່ານຮັບບັບຕິດສະມາ] ບໍ?
- ທ່ານເຄີຍຮ່ວມໃນການເອົາລູກອອກບໍ? ເຄີຍຮ່ວມສຳພັນເພດກັບຄົນເພດດຽວກັນບໍ? [ໝາຍເຫດ: ຄົນຜູ້ທີ່ຕອບວ່າ ເຄີຍ ຕໍ່ຄຳຖາມເຫລົ່ານີ້ ຕ້ອງໄດ້ຮັບການສຳພາດຈາກປະທານເຜີຍແຜ່ກ່ອນຈະຮັບບັບຕິດສະມາໄດ້.]

## ຮັກສາພະວາຈາແຫ່ງປັນຍາ

ພະຜູ້ເປັນເຈົ້າໄດ້ເປີດເຜີຍກົດຂອງສຸກຂະພາບຕໍ່ສາດສະດາ ໂຈເຊັບ ສະມິດ ເຊິ່ງເອີ້ນວ່າ ພະວາຈາແຫ່ງປັນຍາ. ກົດນີ້ສອນເຮົາເຖິງອາຫານ ແລະ ສິ່ງອື່ນໆທີ່ເຮົາຄວນ ແລະ ບໍ່ຄວນກິນ ຫລື ໃຊ້ເພື່ອຮັກສາສຸກຂະພາບຂອງຮ່າງກາຍ ແລະ ຮັກສາເຮົາໃຫ້ເປັນອິດສະລະຈາກອິດທິພົນຂອງຄວາມຊົ່ວຮ້າຍ. ພະຜູ້ເປັນເຈົ້າໄດ້ສັນຍາວ່າພະອົງຈະໃຫ້ພອນກ່ຽວກັບສຸກຂະພາບ, ພະລັງ, ຄວາມປ້ອງກັນຕໍ່ຄວາມຊົ່ວຮ້າຍ, ແລະ ການພ້ອມທີ່ຈະຟັງຄວາມຈິງທາງວິນຍານຫລາຍຂຶ້ນແກ່ເຮົາ.

ໃຫ້ຈື່ຈຳວ່າຮ່າງກາຍຂອງເຮົາເປັນສິ່ງທີ່ສັກສິດ. ເຮົາຄວນເຮັດຕໍ່ມັນດ້ວຍຄວາມນັບຖື ແລະ ເຄົາລົບ. ພະວາຈາແຫ່ງປັນຍາສອນວ່າ ເຮົາຕ້ອງກິນອາຫານທີ່ມີປະໂຫຍດ. ມັນໄດ້ສອນຢ່າງເຈາະຈົງວ່າ ເຮົາຕ້ອງຫລີກລ້ຽງສິ່ງທີ່ເປັນອັນຕະລາຍ ເຊິ່ງຮ່ວມດ້ວຍເຫລົ້າ, ຢາສູບ, ຊາ, ແລະ ກາເຟ. ນອກຈາກນີ້ແລ້ວ ເຮົາຕ້ອງຫລີກລ້ຽງຢາ

ໝາຍເຫດ

ໝາຍເຫດ

ທີ່ເປັນອັນຕະລາຍທຸກໆຢ່າງ. ເພື່ອຈະຮັບບັບຕິດສະມາ ແລະ ການຢືນຢັນ, ຄົນທີ່ທ່ານສອນຕ້ອງເຊົາສິ່ງເຫລົ່ານີ້. ຄົນທີ່ເຊື່ອຟັງພະວາຈາແຫ່ງປັນຍາ ເປັນຄົນພ້ອມທີ່ຈະຟັງຄວາມຈິງທາງວິນຍານຫລາຍຂຶ້ນ.

ປະຫານເພີຍແຜ່ຂອງທ່ານຈະຕອບຄຳຖາມກ່ຽວກັບສິ່ງຕິດແສດຢ່າງອື່ນໃນບ່ອນທີ່ທ່ານສອນຢູ່ ວ່າຮ່ວມຢູ່ນຳພະວາຈາແຫ່ງປັນຍາຫລືບໍ່.

## ການເອົາຊະນະການຕິດແສດ

ທ່ານສາມາດຊ່ວຍຜູ້ທີ່ຢາກເຊົາສູບຢາ, ກິນເຫລົ້າ, ແລະ ຄວາມເຄີຍຊິນອື່ນໆໄດ້ ໂດຍການເຮັດຕາມຫລັກທຳເຫລົ່ານີ້. ຄຳແນະນຳຂ້າງລຸ່ມນີ້ແມ່ນໃຊ້ໂດຍສະເພາະກັບພະວາຈາແຫ່ງປັນຍາ ແຕ່ທ່ານສາມາດດັດແປງມັນເພື່ອໃຊ້ສຳລັບການຕິດແສດຢ່າງອື່ນໄດ້ຄືກັນ.

1. ຊ່ວຍໃຫ້ຜູ້ສົນໃຈຕັ້ງເປົ້າໝາຍວ່າ ເມື່ອໃດ ແລະ ວິທີໃດ ທີ່ເຂົາເຈົ້າຈະຮັກສາພະວາຈາແຫ່ງປັນຍາ.
2. ອະທິຖານເພື່ອເຂົາເຈົ້າໃນການອະທິຖານສ່ວນຕົວຂອງທ່ານ ແລະ ໃນຕອນທີ່ທ່ານຢູ່ນຳເຂົາເຈົ້າ.
3. ໃຫ້ຄວາມຫວັງ ແລະ ໃຫ້ກຳລັງໃຈ—ເຖິງແມ່ນວ່າເຂົາເຈົ້າໄດ້ກັບໄປສູ່ສະພາບເດີມ.
4. ໃຫ້ສອນພະກິດຕິຄຸນຕໍ່ເຂົາເຈົ້າຕໍ່ໄປ. ໃຫ້ສອນເຂົາເຈົ້າວິທີທີ່ຈະໃຊ້ການອະທິຖານ ແລະ ສັດທາເປັນແຫລ່ງທີ່ຈະໃຫ້ຄວາມເຂັ້ມແຂງ.
5. ຊ່ວຍເຂົາເຈົ້າໃຫ້ໄປໂບດເປັນປະຈຳ ແລະ ພັດທະນາຄວາມເປັນເພື່ອນກັບຜູ້ທີ່ຮັກສາພະວາຈາແຫ່ງປັນຍາ ແລະ ຜູ້ທີ່ໄດ້ເອົາຊະນະການຕິດແສດແບບດຽວກັນແລ້ວ.
6. ເມື່ອເໝາະສົມ, ສະເໜີໃຫ້ພອນຂອງຖານະປະໂລຫິດແກ່ເຂົາເຈົ້າ.
7. ຊຸກຍູ້ເຂົາເຈົ້າໃຫ້ເອົາສິ່ງທີ່ອັນຕະລາຍອອກໄປຈາກບ້ານ.

ເບິ່ງບົດທີ 10 ເພື່ອຄຳແນະນຳເພີ່ມເຕີມໃນການຊ່ວຍເຫລືອຄົນທີ່ຈະເອົາຊະນະການຕິດແສດ.

## ການສຶກສາພະຄຳພີ

| | | |
|---|---|---|
| D&C 89 | 1 ໂກລິນໂທ 3:16–17 | 1 ໂກລິນໂທ 6:19–20 |

## ຄຳໝັ້ນສັນຍາ

- ທ່ານຈະຮັກສາພະວາຈາແຫ່ງປັນຍາບໍ?

### ຄຳຖາມສຳລັບການສຳພາດກ່ອນບັບຕິດສະມາກ່ຽວກັບບົດຮຽນນີ້

- ທ່ານເຂົ້າໃຈຫຍັງແດ່ກ່ຽວກັບພະວາຈາແຫ່ງປັນຍາ? ທ່ານເຕັມໃຈທີ່ຈະເຊື່ອຟັງກົດນີ້ [ກ່ອນທ່ານຮັບບັບຕິດສະມາ] ບໍ?

## ຮັກສາກົດເງິນສ່ວນສິບ

ໜຶ່ງໃນຈະນວນພອນທີ່ຍິ່ງໃຫຍ່ຂອງການເປັນສະມາຊິກໃນສາດສະໜາຈັກຂອງພະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍແມ່ນສິດພິເສດທີ່ໄດ້ບໍລິຈາກໃຫ້ແກ່ການເຕີບໃຫຍ່ຂອງອານາຈັກຂອງພະເຈົ້າ ຜ່ານການຈ່າຍເງິນສ່ວນສິບ. ເງິນສ່ວນສິບເປັນກົດອັນສັກສິດທີ່ເກົ່າແກ່. ຕົວຢ່າງ, ໃນພະຄຳພີເດີມສາດສະດາ ອັບລາຮາມ ໄດ້ຈ່າຍເງິນສ່ວນສິບໃນສິ່ງຂອງທັງໝົດທີ່ເພິ່ນມີ (see Alma 13:15).

ຕໍ່ຄົນທັງຫລາຍທີ່ຈ່າຍເງິນສ່ວນສິບ, ພະຜູ້ເປັນເຈົ້າສັນຍາວ່າ ພະອົງຈະ "ໄຂປະຕູສະຫວັນ ແລະ ຖອກເທພະພອນທຸກໆຊະນິດຍັງພວກເຈົ້າ . . . ຢ່າງເຕັມບໍລິບູນ" (ມາລາກີ 3:10). ພອນເຫລົ່ານີ້ອາດຈະເປັນສຳລັບທາງໂລກ ຫລື ທາງວິນຍານ, ແຕ່ມັນຈະເກີດຂຶ້ນສຳລັບຜູ້ທີ່ເຊື່ອຟັງກົດອັນສັກສິດນີ້.

ໝາຍເຫດ

ເງິນສ່ວນສິບໝາຍຄວາມວ່າ ໜຶ່ງໃນສິບສ່ວນ, ແລະ ພະຜູ້ເປັນເຈົ້າໄດ້ບັນຊາເຮົາໃຫ້ຈ່າຍໜຶ່ງສ່ວນສິບຂອງການມີເພີ່ມຂຶ້ນຂອງເຮົາ, ເຊິ່ງໝາຍເຖິງລາຍໄດ້ ເພື່ອເຮົາຈະໄດ້ຮັບພອນ. ກົດຂອງເງິນສ່ວນສິບໃຫ້ເຮົາໄດ້ມີໂອກາດຊ່ອຍສ້າງອານາຈັກຂອງພະອົງ. ເງິນສ່ວນສິບຂອງເຮົາແມ່ນສັກສິດຕໍ່ພະຜູ້ເປັນເຈົ້າ, ແລະ ເຮົາໃຫ້ກຽດພະອົງໂດຍການຈ່າຍເງິນສ່ວນສິບ. ພະເຈົ້າສັນຍາວ່າ ຈະໃຫ້ພອນຢ່າງຫລວງຫລາຍສຳລັບຄົນທີ່ຈ່າຍສ່ວນສິບດ້ວຍຄວາມສັດຊື່. ຜູ້ທີ່ບໍ່ຈ່າຍເງິນສ່ວນສິບ ເປັນຄົນໂກງພະເຈົ້າ (ເບິ່ງ ມາລາກີ 3:8). ເຂົາເຈົ້າຍຶດເອົາສິ່ງທີ່ເປັນຂອງພະເຈົ້າຢ່າງຖືກຕ້ອງໄວ້ໃຫ້ຕົວເອງ. ເຮົາຄວນສະແຫວງຫາອານາຈັກຂອງພະເຈົ້າກ່ອນສິ່ງອື່ນໝົດ, ແລະ ເງິນສ່ວນສິບເປັນວິທີທີ່ສຳຄັນເພື່ອຈະເຮັດແນວນັ້ນໄດ້. ການຈ່າຍເງິນສ່ວນສິບເປັນການສະແດງເຖິງສັດທາຂອງເຮົາ. ເປັນການສະແດງອອກເຖິງຄວາມເຊື່ອຂອງເຮົາໃນພະເຈົ້າ ແລະ ໃນວຽກງານຂອງພະອົງ.

ເງິນສ່ວນສິບແມ່ນຖືກນຳໃຊ້ໃນການອູ້ມຊູກິດຈະກຳຕໍ່ໄປເລື້ອຍໆຂອງສາດສະໜາຈັກ, ດັ່ງເຊັ່ນ ການສ້າງ ແລະ ຮັກສາພະວິຫານ ແລະ ຕຶກໂບດແຫ່ງຕ່າງໆ, ການເຜີຍແຜ່ພະກິດຕິຄຸນທົ່ວໂລກ, ການດຳເນີນວຽກງານໃນພະວິຫານ ແລະ ການສືບປະຫວັດຄອບຄົວ, ແລະ ກິດຈະກຳຫລາຍໆຢ່າງໃນທົ່ວໂລກ. ເງິນສ່ວນສິບບໍ່ໄດ້ຈ່າຍໃຫ້ຜູ້ນຳຕ່າງໆຂອງສາດສະໜາຈັກ, ເຊິ່ງເປັນຜູ້ທີ່ຮັບໃຊ້ໂດຍປາດສະຈາກຄ່າແຮງງານໃນທຸກໆກໍລະນີ.

ຜູ້ນຳທັງຫລາຍຂອງສາດສະໜາຈັກໃນທ້ອງຖິ່ນຕ່າງໆ ຈະສົ່ງເງິນສ່ວນສິບທີ່ໄດ້ຮັບທຸກໆອາທິດໄປໃຫ້ສຳນັກງານໃຫຍ່ໂດຍກົງ. ສະພາທີ່ປະກອບດ້ວຍຝ່າຍປະທານສູງສຸດ, ກຸ່ມອັກຄະສາວົກສິບສອງ ແລະ ຝ່າຍອະທິການຜູ້ຄວບຄຸມ ເປັນຜູ້ຕັດສິນໃຈວ່າ ຈະໃຊ້ເງິນສ່ວນສິບທີ່ສັກສິດເຫລົ່ານີ້ໃນທາງໃດ.

### ການສຶກສາພະຄຳພີ

**ເງິນສ່ວນສິບ**

| | | |
|---|---|---|
| D&C 119 | ເຮັບເລີ 7:1–2 | ລະບຽບພວກເລວີ 27:30–33 |
| D&C 120 | ປະຖົມມະການ 14:18–20 | ມາລາກີ 3:7–12 |

**ສັດທາ**

| | |
|---|---|
| 3 ນີໄຟ 13:33 | ອີເທີ 12:6 |

### ຄຳໝັ້ນສັນຍາ

- ທ່ານຈະຮັກສາກົດເງິນສ່ວນສິບເມື່ອທ່ານຮັບບັບຕິສະມາແລ້ວບໍ?

**ຄຳຖາມສຳລັບການສຳພາດກ່ອນບັບຕິສະມາກ່ຽວກັບບົດຮຽນນີ້**

- ທ່ານເຂົ້າໃຈຫຍັງແດ່ກ່ຽວກັບກົດເງິນສ່ວນສິບ? ທ່ານເຕັມໃຈທີ່ຈະເຊື່ອຟັງກົດນີ້ບໍ?

## ຮັກສາກົດຖືສິນອົດເຂົ້າ

ພອນອັນຍິ່ງໃຫຍ່ມີໄວ້ໃຫ້ຜູ້ທີ່ເຊື່ອຟັງພະບັນຍັດຂອງພະເຈົ້າກ່ຽວກັບການຖືສິນອົດເຂົ້າ. ການຖືສິນອົດເຂົ້າໝາຍຄວາມວ່າ ບໍ່ກິນເຂົ້າ ແລະ ດື່ມນ້ຳຊົ່ວລະຍະໜຶ່ງ. ຕາມທຳມະດາແລ້ວ ວັນອາທິດທຳອິດຂອງແຕ່ລະເດືອນໄດ້ຖືກຈັດໄວ້ເປັນມື້ພິເສດເພື່ອອົດກິນສອງຄາບເຂົ້າຕໍ່ກັນ, ເພື່ອອະທິຖານ ແລະ ສະແດງປະຈັກພະຍານ. ການຖືສິນອົດເຂົ້າ ແລະ ການອະທິຖານ ເປັນສິ່ງທີ່ເຮົາເຮັດພ້ອມກັນ. ເມື່ອເຮົາຖືສິນອົດເຂົ້າ ແລະ ອະທິຖານດ້ວຍສັດທາເຮົາພ້ອມທີ່ຈະຟັງຫລາຍຂຶ້ນເພື່ອຮັບຄຳຕອບ ຕໍ່ການອະທິຖານຂອງເຮົາ ແລະ ຮັບພອນຈາກພະຜູ້ເປັນເຈົ້າ. ພະອົງສັນຍາເຮົາວ່າ ພະອົງຈະນຳພາເຮົາຕະຫລອດໄປ. ເຮົາຄວນຖືສິນອົດເຂົ້າ ແລະ ອະທິຖານສຳລັບຈຸດປະສົງບາງຢ່າງ. ການຖືສິນອົດເຂົ້າເປັນເລື່ອງສ່ວນຕົວ ແລະ ທາງວິນຍານ, ແລະ ເຮົາບໍ່ຄວນປ່າວປະກາດໃຫ້ຄົນອື່ນຮູ້ວ່າ ເຮົາອົດອາຫານ.

ສາດສະໜາທີ່ແທ້ຈິງ ຮ່ວມດ້ວຍການເບິ່ງແຍງຄົນຍາກຈົນ. ເຮົາຕ້ອງຊ່ອຍເຫລືອເຂົາເຈົ້າໃຫ້ບັນລຸເຖິງຄວາມຕ້ອງການທາງຮ່າງກາຍ ແລະ ທາງວິນຍານຂອງເຂົາເຈົ້າ. ເມື່ອເຮົາອົດອາຫານ, ເຮົາໄດ້ບໍລິຈາກເງິນໃຫ້ສາດສະໜາຈັກເພື່ອຊ່ອຍເຫລືອຄົນຍາກຈົນ ແລະ ຄົນຂັດສົນ. ເຮົາເອີ້ນສິ່ງນີ້ວ່າ ເງິນບໍລິຈາກຖືສິນອົດເຂົ້າ.

ບົດຮຽນທີ 4:
ພະບັນຍັດ

ໝາຍເຫດ

ເຮົາບໍລິຈາກເງິນຢ່າງໜ້ອຍທີ່ສຸດໃຫ້ເທົ່າກັບເງິນທີ່ເຮົາໃຊ້ຊື້ອາຫານສອງຄາບ. ເຖິງຢ່າງໃດກໍຕາມ, ເຮົາບໍ່ຈໍາເປັນຕ້ອງຈໍາກັດການບໍລິຈາກຂອງເຮົາໃຫ້ເທົ່າກັບເງິນສໍາລັບອາຫານສອງຄາບ. ເຮົາຖືກຊຸກຍູ້ໃຫ້ມີໃຈເພື່ອແຜ່ເທົ່າທີ່ຈະເປັນໄປໄດ້. ໂດຍການເບິ່ງແຍງຄົນຍາກຈົນ, ເຮົາໄດ້ຊ່ອຍໃຫ້ພັນທະສັນຍາແຫ່ງການບັບຕິສະມາຂອງເຮົາສົມບູນ ແລະ ຮັກສາການປົດບາບຂອງເຮົາ.

## ການສຶກສາພະຄໍາພີ

**ການອົດອາຫານ**

| | | |
|---|---|---|
| Omni 1:26 | Alma 17:2–33 | D&C 59:12–16 |
| ແອລະມາ 5:45–46 | ໂມໂລໄນ 6:5 | ມັດທາຍ 6:1–4, 16–18 |
| Alma 6:6 | D&C 88:76 | ເອຊາຢາ 58:6–11 |

**ການດູແລຄົນຍາກຈົນ**

| | | |
|---|---|---|
| ໂມໄຊຢາ 4:16–27 | Alma 4:12–13 | ຢາໂກໂບ 1:27 |
| ໂມໄຊຢາ 18:8–10 | ມັດທາຍ 25:34–46 | ເອຊາຢາ 58:3–12 |

## ຄໍາໝັ້ນສັນຍາ

- ທ່ານຈະຖືສິນອົດເຂົ້າ ແລະ ອະທິຖານໃນວັນອາທິດໜ້າທີ່ຖືສິນອົດເຂົ້າ ເພື່ອຄວາມຕ້ອງການພິເສດບາງຢ່າງບໍ?
- ທ່ານຈະບໍລິຈາກເງິນຖືສິນອົດເຂົ້າຢ່າງເພື່ອແຜ່ [ຫລັງຈາກທ່ານຮັບບັບຕິສະມາແລ້ວ] ບໍ?

## ວິທີບໍລິຈາກເງິນສ່ວນສິບ ແລະ ການບໍລິຈາກອື່ນໆ

ເງິນສ່ວນສິບ ແລະ ການບໍລິຈາກອື່ນໆແມ່ນຈ່າຍດ້ວຍຄວາມສະໝັກໃຈ ແລະ ເປັນເລື່ອງສ່ວນຕົວ. ສະມາຊິກອາດຈະຈ່າຍເງິນສ່ວນສິບ ແລະ ບໍລິຈາກເວລາໃດກໍໄດ້, ແຕ່ຕາມທໍາມະດາແລ້ວ ຈະດີທີ່ສຸດທີ່ຈະຈ່າຍເງິນສ່ວນສິບຕາມລາຍໄດ້ ທັນທີທີ່ໄດ້ຮັບ ແລະ ບໍລິຈາກເງິນຖືສິນອົດເຂົ້າໃນມື້ທີ່ອົດເຂົ້າ. ສະມາຊິກເຮັດການບໍລິຈາກໂດຍການຂຽນໃສ່ໃບບໍລິຈາກ, ເຊິ່ງສາມາດໄປເອົາໄດ້ຈາກຝ່າຍອະທິການ. ສະມາຊິກຈະເກັບໃບສໍາເນົາສີເຫລືອງໄວ້ ແລະ ເອົາໃບສີຂາວ ພ້ອມດ້ວຍເງິນບໍລິຈາກໃສ່ໃນຊອງບໍລິຈາກເງິນຖືສິນອົດເຂົ້າທີ່ໄດ້ຈັດຫາໄວ້ໃຫ້. ຊອງນັ້ນຈະຖືກມອບໃຫ້ແກ່ຄົນໜຶ່ງໃນຝ່າຍອະທິການ. ເງິນບໍລິຈາກເຫລົ່ານີ້ ຖືວ່າເປັນສິ່ງສັກສິດ ແລະ ເປັນຂອງພະຜູ້ເປັນເຈົ້າ. ຄົນໜຶ່ງໃນຝ່າຍອະທິການ ແລະ ສະໝຽນຄົນໜຶ່ງ ຈະເປັນຜູ້ເຮັດບັນຊີເງິນບໍລິຈາກຢ່າງລະອຽດຮອບຄອບ.

ສະມາຊິກຈະໄປສະຫລຸບເງິນສ່ວນສິບນໍາອະທິການໃນທ້າຍຂອງແຕ່ລະປີ ເພື່ອບອກໃຫ້ຮູ້ເຖິງຄວາມສັດຊື່ຂອງການຈ່າຍເງິນສ່ວນສິບຂອງເຂົາ. ໃນການໄປພົບແບບສ່ວນຕົວນີ້, ສະມາຊິກຈະໄດ້ຮັບໃບລາຍງານສຸດທ້າຍຂອງປີສໍາລັບການບໍລິຈາກທັງໝົດຂອງເຂົາ. ລາຍລະອຽດຂອງການເງິນທັງໝົດໄດ້ຖືກຮັກສາໄວ້ເປັນຄວາມລັບຢ່າງເຂັ້ມງວດ.

## ສອນວິທີບໍລິຈາກເງິນສ່ວນສິບ ແລະ ການບໍລິຈາກອື່ນໆ.

ໃຫ້ສະແດງໃບບໍລິຈາກ ແລະ ອະທິບາຍເຖິງວິທີໃຊ້ມັນ. ຫລັງຈາກຜູ້ປ່ຽນໃຈເຫລື້ອມໃສໄດ້ຮັບບັບຕິສະມາແລ້ວ, ທ່ານອາດຈະຕ້ອງໄດ້ຊ່ອຍເຂົາເຈົ້າຂຽນໃບບໍລິຈາກນັ້ນ.

## ເຊື່ອຟັງ ແລະ ໃຫ້ກຽດຕໍ່ກົດໝາຍ

ສິດທິຊົນຍຸກສຸດທ້າຍທຸກຫົນທຸກແຫ່ງເຊື່ອໃນການເຊື່ອຟັງກົດໝາຍຂອງປະເທດທີ່ເຂົາເຈົ້າອາໄສຢູ່. ສະມາຊິກຂອງສາດສະໜາຈັກໄດ້ຖືກສັ່ງສອນໃຫ້ເປັນພົນລະເມືອງທີ່ດີ, ໃຫ້ມີສ່ວນໃນລັດຖະບານປະຊາຊົນ ແລະ ໃນລະບົບການເມືອງ, ແລະ ໃຫ້ການຮັບໃຊ້ໃນຊຸມຊົນ. ເຖິງຢ່າງໃດກໍຕາມ, ເມື່ອເຂົາເຈົ້າເຮັດ, ເຂົາເຈົ້າຄວນເຮັດໃນຖານະເປັນພົນລະເມືອງທີ່ຫ່ວງໃຍ ບໍ່ແມ່ນໃນຖານະເປັນຕົວແທນຂອງສາດສະໜາຈັກ.

### ການສຶກສາພະຄຳພີ

| | | |
|---|---|---|
| D&C 58:21 | D&C 130:20–21 | ຫລັກແຫ່ງຄວາມເຊື່ອ 1:12 |
| D&C 98:5 | D&C 134 | |

### ຄຳໝັ້ນສັນຍາ

- ທ່ານຈະເຊື່ອຟັງກົດໝາຍຂອງປະເທດທີ່ທ່ານອາໄສຢູ່ບໍ?

**ຄຳຖາມສຳລັບການສຳພາດກ່ອນບັບຕິສະມາກ່ຽວກັບບົດຮຽນນີ້**

- ທ່ານເຄີຍເຮັດຄວາມຜິດທີ່ຮ້າຍແຮງບໍ? ຖ້າວ່າເຄີຍເຮັດ, ດຽວນີ້ທ່ານຢູ່ໃນຊ່ວງການຝາກໂທດ ຫລື ປ່ອຍຕົວອອກຄຸກທີ່ມີເງື່ອນໄຂບໍ? [ໝາຍເຫດ: ຄົນ ຜູ້ທີ່ຕອບວ່າ ເຄີຍ ຕໍ່ຄຳຖາມເຫລົ່ານີ້ຕ້ອງໄດ້ຮັບການສຳພາດຈາກປະທານເຜີຍແຜ່ກ່ອນຈະຮັບບັບຕິສະມາໄດ້.]

### ກິດຈະກຳ

ສຳລັບພະບັນຍັດແຕ່ລະຂໍ້ໃນບົດຮຽນນີ້, ໃຫ້ຂຽນ ຄຳສັນຍາໃນພະຄຳພີທີ່ພະຜູ້ເປັນເຈົ້າເຮັດໄວ້ນຳຜູ້ທີ່ຮັກສາພະບັນຍັດຂໍ້ນັ້ນ. ບັນທຶກຄຳສັນຍາທີ່ໄດ້ກາຍເປັນຈິງໃນຊີວິດຂອງທ່ານ ໄວ້ໃນປຶ້ມສຶກສາຂອງທ່ານ.

ໝາຍເຫດ

ບົດຮຽນທີ 5:
ກົດ ແລະ ພິທີການ

ໝາຍເຫດ

# ກົດ ແລະ ພິທີການ

## *ຫລັງຈາກບັບຕິສະມາ ແລະ ການຢືນຢັນ*



© 1998 Del Parson. ຫ້າມລອກແບບ.

### ຄຽນສອນ

ຫລັງຈາກຜູ້ປ່ຽນໃຈເຫລື້ອມໃສໄດ້ຮັບບັບຕິສະມາ ແລະ ການຢືນຢັນແລ້ວ, ຜູ້ນຳຂອງຫວອດຈະເປັນຜູ້ຕັດສິນໃຈວ່າ ຈະໃຫ້ຜູ້ສອນສາດສະໜາປະຈຳຫວອດ ຫລື ຜູ້ສອນສາດສະໜາເຕັມເວລາ ເປັນຜູ້ນຳໃນການສອນ ແລະ ວ່າຜູ້ສອນສາດສະໜາເຕັມເວລາຈະພົວພັນດົນປານໃດ. ບົດຮຽນນີ້ຕ້ອງໄດ້ສອນໃຫ້ສະມາຊິກໃໝ່ ບໍ່ດົນຫລັງຈາກເຂົາເຈົ້າຮັບບັບຕິສະມາ ແລະ ການຢືນຢັນ. ທ່ານສາມາດເລີ່ມສອນເຂົາເຈົ້າກ່ຽວກັບກົດ ແລະ ພິທີການເຫລົ່ານີ້ໄດ້ ລະຫວ່າງການຮັບບັບຕິສະມາ ແລະ ການຢືນຢັນຂອງເຂົາ ຫລື ກ່ອນເຂົາຮັບບັບຕິສະມາກໍໄດ້. ຜູ້ຈະຮັບບັບຕິສະມາຢ່າງໜ້ອຍທີ່ສຸດຄວນຮູ້ກ່ຽວກັບກົດ ແລະ ພິທີການເຫລົ່ານີ້ກ່ອນຮັບບັບຕິສະມາ.

ບົດຮຽນນີ້ຄ້າຍຄືກັນກັບບົດຮຽນທີ 4. ວິທີທີ່ທ່ານເຮັດ ຄວນຈະເປັນໄປຕາມຄວາມຕ້ອງການຂອງຜູ້ທີ່ຫາກໍປ່ຽນໃຈເຫລື້ອມໃສ ແລະ ການນຳທາງຈາກພະວິນຍານ. ໃຫ້ຄິດ ແລະ ອະທິຖານເປັນປະຈຳກ່ຽວກັບວິທີທີ່ຈະຊ່ອຍເຂົາເຈົ້າໃຫ້ດຳລົງຊີວິດຕາມພະກິດຕິຄຸນ. ແນວຄິດຮ່ວມດ້ວຍ:

- ສອນສະມາຊິກໃໝ່ແຕ່ລະກົດ ແລະ ພິທີການຈາກບົດຮຽນນີ້ໃນຂະນະທີ່ທົບທວນບົດຮຽນ "ຂ່າວສານຂອງການຟື້ນຟູ," "ແຜນແຫ່ງຄວາມລອດ," ແລະ "ພະກິດຕິຄຸນຂອງພະເຍຊູຄຣິດ." ຕົວຢ່າງເຊັ່ນ, ຂະນະທີ່ທົບທວນຂ່າວສານຂອງການຟື້ນຟູ ທ່ານຄວນສອນກ່ຽວກັບຖານະປະໂລຫິດ ແລະ ວຽກງານຂອງຜູ້ສອນສາດສະໜານຳ; ຂະນະທີ່ທົບທວນແຜນແຫ່ງຄວາມລອດ ທ່ານຄວນສອນກ່ຽວກັບການແຕ່ງງານນິລັນດອນ, ພະວິຫານ, ແລະ ວຽກງານປະຫວັດຄອບຄົວ, ແລະ ການສອນ ແລະ ການຮຽນຮູ້ໃນສາດສະໜາຈັກນຳ. ເມື່ອທົບທວນພະກິດຕິຄຸນຂອງພະເຍຊູຄຣິດ ທ່ານຄວນສອນກ່ຽວກັບ ທາງຊື່ ແລະ ແຄບ ແລະ ການຮັບໃຊ້ໃນສາດສະໜາຈັກນຳ.
- ສອນກົດ ແລະ ພິທີການສອງ ຫລື ສາມຂໍ້ໃຫ້ເປັນບົດຮຽນດຽວ.
- ສອນກົດ ຫລື ພິທີການຂໍ້ດຽວໃຫ້ເປັນບົດຮຽນໜຶ່ງ.

ເຮັດວຽກຮ່ວມກັນນຳສະມາຊິກເພື່ອຊ່ອຍສະມາຊິກໃໝ່ໃຫ້ຍອມຮັບ ແລະ ເລີ່ມຕົ້ນດຳລົງຊີວິດຕາມກົດ ແລະ ພິທີການເຫລົ່ານີ້. ຊ່ອຍສະມາຊິກໃໝ່ໃຫ້ຮູ້ວ່າໂດຍການຮັກສາກົດຂອງພະເຈົ້າ, ເຂົາເຈົ້າຈະຮັກສາການປົດບາບຂອງເຂົາເຈົ້າໄວ້ ແລະ ຢູ່ໃນເສັ້ນທາງທີ່ນຳໄປສູ່ຊີວິດນິລັນດອນ. ເຂົາເຈົ້າຈະປະສົບຄວາມສະຫງົບ ແລະ ຄວາມສຸກອັນຍິ່ງໃຫຍ່. ເຂົາເຈົ້າຈະພົບຄຳຕອບຂອງບັນຫາໃນຊີວິດ ແລະ ອຸ່ນໃຈທີ່ຮູ້ວ່າເຂົາເຈົ້າເປັນສະມາຊິກຂອງສາດສະໜາຈັກທີ່ແທ້ຈິງຂອງພະເຍຊູຄຣິດ. ກົດ ແລະ ພິທີການຕ່າງໆຮັບໃຊ້ເປັນການນຳທາງສູ່ຄວາມສຸກໃນຊີວິດ, ໂດຍການມີສັດທາໃນພະເຍຊູຄຣິດ ແລະ ຄວາມຫວັງທີ່ໝັ້ນຄົງວ່າຈະໄດ້ຮັບຊີວິດນິລັນດອນນຳພະບິດາຜູ້ສະຖິດໃນສະຫວັນຂອງເຮົາ.

ໝາຍເຫດ

## ຮຽນກ່ຽວກັບກົດ, ພິທີການ, ແລະ ຄຳໝັ້ນສັນຍາຕ່າງໆ

ເມື່ອທ່ານສຶກສາ "ກົດ ແລະ ພິທີການ," ມັນຈະເປັນປະໂຫຍດທີ່ຈະເຮັດຕາມແບບແຜນຂ້າງລຸ່ມນີ້.

- ສຶກສາສ່ວນທີ່ບັນລະຍາຍເຖິງຄຳສອນ, ແລະ ຂຽນແຜນບົດຮຽນທີ່ງ່າຍໂດຍມີສາມຫາຫ້າຂໍ້ທີ່ສຳຄັນ.
- ໃຫ້ຝຶກສອນກັບຄູ່ຜູ້ສອນສາດສະໜາຂອງທ່ານປະມານສອງຫລືສາມນາທີ. ຝຶກຝົນວິທີທີ່ທ່ານຈະເຊື້ອເຊີນໃຫ້ຜູ້ສົນໃຈເຮັດຄຳໝັ້ນສັນຍາ ແລະ ວິທີທີ່ທ່ານຈະແກ້ໄຂບັນຫາ.
- ສົນທະນາວິທີທີ່ຈະຊ່ອຍສະມາຊິກໃໝ່ໃຫ້ຮັກສາພະບັນຍັດເຊິ່ງເຂົາໄດ້ຍອມຮັບ.

## ຖານະປະໂລຫິດ ແລະ ອົງການຊ່ອຍເຫລືອ

ຖານະປະໂລຫິດຄືພະລັງ ແລະ ອຳນາດທີ່ໄດ້ມອບໃຫ້ມະນຸດເພື່ອກະທຳໃນພະນາມຂອງພະເຈົ້າເພື່ອຄວາມລອດຂອງລູກໆຂອງພະອົງ. ຜ່ານຖານະປະໂລຫິດ ເຮົາຈະຮັບພິທີການແຫ່ງຄວາມລອດ, ຄືກັນກັບພອນຂອງການປິ່ນປົວ, ປອບໂຍນ, ແລະ ໃຫ້ຄຳແນະນຳ.

ສາດສະໜາຈັກຂອງພະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍ ໄດ້ນຳພາໂດຍພະເຢຊູຄຣິດ ຜ່ານທາງອັກຄະສາວົກ ແລະ ສາດສະດາທັງຫລາຍ. ພວກເພິ່ນເປັນຄົນທີ່ຊອບທຳຜູ້ໄດ້ຖືກເອີ້ນຈາກພະເຈົ້າ ແລະ ໄດ້ມີຖານະປະໂລຫິດ. ໃນສະໄໝໂບຮານ ພະຄຣິດໄດ້ແຕ່ງຕັ້ງອັກຄະສາວົກຂອງພະອົງ ແລະ ໄດ້ມອບຖານະປະໂລຫິດໃຫ້ແກ່ພວກເພິ່ນ. ອຳນາດນັ້ນໄດ້ສູນຫາຍໄປໃນລະຍະທີ່ຜູ້ຄົນປະຕິເສດພະກິດຕິຄຸນ ແລະ ຂ້າພະຄຣິດ ແລະ ອັກຄະສາວົກ.

ອຳນາດຖານະປະໂລຫິດໄດ້ຖືກຟື້ນຟູຄືນມາໃໝ່ ໃນປີ 1829 ເມື່ອ ໂຢຮັນບັບຕິດ ໄດ້ມາປາກົດຕໍ່ ສາດສະດາ ໂຢເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ. ເພິ່ນໄດ້ວາງມືໃສ່ເທິງຫົວເຂົາເຈົ້າ ແລະ ມອບຖານະປະໂລຫິດແຫ່ງອາໂລນໃຫ້ (see D&C 13). ບໍ່ດົນຈາກນັ້ນ ເປໂຕ, ຢາໂກໂບ, ແລະ ໂຢຮັນ ແຫ່ງກຸ່ມອັກຄະສາວົກທຳອິດໄດ້ວາງມືໃສ່ເທິງຫົວຂອງ ໂຢເຊັບ ສະມິດ ແລະ ອໍລີເວີ ຄາວເດີຣີ ແລະ ມອບຖານະປະໂລຫິດແຫ່ງເມນຄີເສເດັກໃຫ້ເຂົາເຈົ້າ, ເຊິ່ງ ເປໂຕ, ຢາໂກໂບ, ແລະ ໂຢຮັນ ໄດ້ຮັບຈາກພະເຢຊູຄຣິດ (see D&C 27:12–13).

ຜູ້ຊາຍສາມາດຮັບອຳນາດຖານະປະໂລຫິດໄດ້ພຽງແຕ່ໂດຍທາງພິທີການທີ່ເໝາະສົມໂດຍການວາງມືໂດຍຜູ້ທີ່ມີອຳນາດເທົ່ານັ້ນ. ຊາຍທີ່ໄດ້ຮັບຖານະປະໂລຫິດແມ່ນຜູ້ທີ່ໄດ້ຮັບໂອກາດທີ່ດີເລີດ. ເຂົາໄດ້ເຂົ້າຮ່ວມພັນທະສັນຍາເພື່ອເຮັດໜ້າທີ່ອັນສັກສິດໃຫ້ສົມບູນ, ຮັບໃຊ້ຄົນອື່ນໆ, ແລະ ຊ່ອຍສ້າງສາສາດສະໜາຈັກ. ເຂົາຕ້ອງມີຄວາມປາດຖະໜາທີ່ຈະຮັບໃຊ້ພະເຈົ້າ ແລະ ຕ້ອງໄດ້ຖືກແຕ່ງຕັ້ງໃຫ້ມີອຳນາດນີ້ (see D&C 4:3; 63:57). ມັນຈຳເປັນຄືກັນສຳລັບຜູ້ດຳລົງຖານະປະໂລຫິດຈະປະກອບພິທີການອັນສັກສິດ, ດັ່ງເຊັ່ນ ບັບຕິດສະມາ ແລະ ການຢືນຢັນ. ພະເຈົ້າຈະສະແດງອຳນາດເມື່ອອຳນາດຖານະປະໂລຫິດຖືກໃຊ້ຢ່າງມີຄ່າຄວນ. ອຳນາດຖານະປະໂລຫິດຕ້ອງຖືກໃຊ້ໃນຄວາມຊອບທຳ, ດ້ວຍຄວາມຮັກ, ແລະ ດ້ວຍຄວາມອົດທົນເທົ່ານັ້ນ.

ຖານະປະໂລຫິດທັງໝົດມາຈາກພະເຈົ້າ. ມີຖານະປະໂລຫິດຢູ່ສອງຢ່າງໃນສາດສະໜາຈັກ: ຖານະປະໂລຫິດແຫ່ງອາໂລນ ແລະ ຖານະປະໂລຫິດແຫ່ງເມນຄີເສເດັກ. ຖານະປະໂລຫິດແຫ່ງອາໂລນປະກອບພິທີການດັ່ງເຊັ່ນ ບັບຕິດສະມາ ແລະ ສິນລະລຶກ. ຊາຍຜູ້ທີ່ມີຄ່າຄວນອາຍຸ 12 ປີຂຶ້ນໄປ ຈະໄດ້ຮັບຖານະປະໂລຫິດແຫ່ງອາໂລນຫລັງຈາກຮັບບັບຕິດສະມາ ແລະ ການຢືນຢັນ.

ຊາຍຜູ້ໃຫຍ່ທີ່ມີຄ່າຄວນໃນທີ່ສຸດຈະໄດ້ຮັບຖານະປະໂລຫິດແຫ່ງເມນຄີເສເດັກ ເຊິ່ງແມ່ນຖານະປະໂລຫິດທີ່ສູງກວ່າ. ສະມາຊິກຂອງສາດສະໜາຈັກໄດ້ຮັບພອນຫລາຍຢ່າງທາງວິນຍານ ແລະ ທາງໂລກຜ່ານອຳນາດຂອງຖານະປະໂລຫິດນີ້. ຜູ້ດຳລົງຖານະປະໂລຫິດແຫ່ງເມນຄີເສເດັກທີ່ມີຄ່າຄວນ ສາມາດມອບຂອງປະທານແຫ່ງພະວິນຍານບໍລິສຸດ, ແຕ່ງຕັ້ງຄົນອື່ນໃຫ້ມີຖານະປະໂລຫິດດັ່ງທີ່ໄດ້ມອບໝາຍ, ເຈີມຄົນເຈັບປ່ວຍດ້ວຍນ້ຳມັນທີ່ເຮັດໃຫ້ສັກສິດແລ້ວ, ແລະ ໃຫ້ພອນແຫ່ງການປິ່ນປົວ ແລະ ປອບໂຍນ. ສາມີ ແລະ ພໍ່ທີ່ຄ່າຄວນຜູ້ທີ່ດຳລົງຖານະປະໂລຫິດແຫ່ງເມນຄີເສເດັກ ສາມາດໃຫ້ພອນພິເສດແກ່ພັນລະຍາ, ລູກ, ແລະ ສະມາຊິກຄົນອື່ນໃນຄອບຄົວໄດ້. ຄູສອນປະຈຳບ້ານ ຈະຢ້ຽມຢາມສະມາຊິກຂອງສາດສະໜາຈັກ ແລະ ເບິ່ງແຍງແຕ່ລະຄົນ ແລະ ຄອບຄົວເຫລົ່ານັ້ນ. ອະທິການ ແລະ ປະທານສະເຕກເປັນຜູ້ພິພາກສາໃນສາດສະໜາຈັກ. ພວກເພິ່ນມີອຳນາດທີ່ຈະຊ່ອຍສິດທິຊົນຜູ້ທີ່ມີບາບໃຫ້ກັບໃຈ ແລະ ຊື່ນຊົມກັບພອນທີ່ສົມບູນຂອງການເປັນສະມາຊິກຂອງສາດສະໜາຈັກ. ພວກເພິ່ນເປັນຜູ້ສຳພາດສະມາຊິກເພື່ອຈະຮັບຮອງການມີຄ່າຄວນຂອງເຂົາເຈົ້າທີ່ຈະເຂົ້າໄປໃນພະວິຫານ.

ໝາຍເຫດ

ພາຍໃຕ້ການນຳພາຂອງຖານະປະໂລຫິດ, ອົງການຊ່ອຍເຫລືອໄດ້ຊ່ອຍເພີ່ມຄວາມເຂັ້ມແຂງໃຫ້ແກ່ສະມາຊິກ. ເຂົາເຈົ້າເປັນແຫລ່ງຊ່ອຍເຫລືອທີ່ສຳຄັນໃນວຽກງານຂອງຜູ້ສອນສາດສະໜາ ໃນການຊ່ອຍຊອກຫາ ແລະ ສອນຜູ້ສົນໃຈ ແລະ ຊ່ອຍສະມາຊິກໃໝ່. ຜູ້ຍິງອາຍຸ 18 ປີ ແລະ ໃຫຍ່ກວ່ານັ້ນ ເປັນສະມາຊິກຂອງສະມາຄົມສະຕີສົງເຄາະ ເຊິ່ງມີໜ້າທີ່ຮັບໃຊ້ຄອບຄົວ, ສ່ວນບຸກຄົນ, ແລະ ຊຸມຊົນ. ຍິງໜຸ່ມອາຍຸ 12 ຫາ 18 ປີເປັນສະມາຊິກຂອງອົງການຍິງໜຸ່ມ. ຊາຍໜຸ່ມອາຍຸ 12 ຫາ 18 ປີຮ່ວມຢູ່ໃນອົງການຊາຍໜຸ່ມ. ເດັກທັງໝົດອາຍຸ 3 ຫາ 11 ປີເປັນສ່ວນຂອງອົງການປະຖົມໄວ. ສະມາຊິກທັງໝົດອາຍຸ 12 ປີ ແລະ ໃຫຍ່ກວ່ານັ້ນ ເຂົ້າຢູ່ໃນໂຮງຮຽນວັນອາທິດ.

### ການສຶກສາພະຄຳພີ

| | | |
|---|---|---|
| ໂມໄຊຢາ 18:17 | D&C 84:19–20 | ລູກາ 9:1–6 |
| Alma 13:1–19 | D&C 107 | ໂຢຮັນ 15:16 |
| D&C 20:38–65 | D&C 121:34–46 | ຢາໂກໂບ 5:14–15 |

### ຄຳໝັ້ນສັນຍາ

- ທ່ານຈະຕຽມພ້ອມເພື່ອຈະໄດ້ຮັບຖານະປະໂລຫິດແຫ່ງອາໂລນບໍ? (ຊາຍອາຍຸ 12 ປີ ແລະ ໃຫຍ່ກວ່ານັ້ນທີ່ເໝາະສົມ ແລະ ມີຄ່າຄວນ)
- ທ່ານຈະຕຽມພ້ອມຮັບຖານະປະໂລຫິດແຫ່ງເມນຄີເສເດັກບໍ? (ຊາຍຜູ້ໃຫຍ່ທີ່ເໝາະສົມ ແລະ ມີຄ່າຄວນ)
- ທ່ານຈະຮ່ວມເຮັດກິດຈະກຳໃນອົງການຊ່ອຍເຫລືອທີ່ເໝາະສົມບໍ?

## ວຽກງານເຜີຍແຜ່ສາດສະໜາ

ສະມາຊິກຜູ້ທີ່ແບ່ງປັນພະກິດຕິຄຸນ ຈະປະສົບກັບຄວາມສຸກ ແລະ ມີພະວິນຍານຂອງພະຜູ້ເປັນເຈົ້າຢ່າງລົ້ນເຫລືອ. ເມື່ອເຮົາແບ່ງປັນພະກິດຕິຄຸນ, ເຮົາຮູ້ຄຸນຄ່າຂອງພະກິດຕິຄຸນ ວ່າມັນມີຄວາມໝາຍຕໍ່ເຮົາແນວໃດ, ແລະ ເຮົາຈະຮູ້ສຶກມີຄວາມຮັກຫລາຍທີ່ສຸດຕໍ່ພະເຈົ້າ ແລະ ຄົນອື່ນ. ພະຜູ້ເປັນເຈົ້າບັນຊາຜູ້ຕິດຕາມພະອົງໃຫ້ປະກາດພະກິດຕິຄຸນໃນທົ່ວໂລກ, ເພື່ອໃຫ້ທຸກຄົນມີໂອກາດທີ່ຈະຮັບ ຫລື ປະຕິເສດ. ເມື່ອຜູ້ຄົນໄດ້ຮັບບັບຕິດສະມາ, ເຂົາໄດ້ເຮັດພັນທະສັນຍາທີ່ຈະເປັນພະຍານຂອງພະເຈົ້າຕະຫລອດໄປ. ເຂົາໄດ້ຖືກບັນຊາໃຫ້ແບ່ງປັນພະກິດຕິຄຸນນຳຄົນຜູ້ທີ່ບໍ່ໄດ້ຮັບມັນເທື່ອ. ເມື່ອເຂົາດຳລົງຊີວິດຕາມພະກິດຕິຄຸນດ້ວຍຄວາມສັດຊື່, ເຂົາຈະເປັນຕົວຢ່າງ, ສະແດງໃຫ້ສະມາຊິກໃນຄອບຄົວ ແລະ ໝູ່ເພື່ອນ ເຫັນເຖິງພອນອັນຍິ່ງໃຫຍ່ທີ່ມາຈາກການດຳລົງຊີວິດຕາມພະກິດຕິຄຸນນັ້ນ. ເຂົາຄວນສວຍໂອກາດທີ່ຈະຕອບຄຳຖາມຕ່າງໆ, ແບ່ງປັນປຶ້ມ, ໜັງສື, ແລະ ສິ່ງອື່ນໆ ຫລື ການສາຍຮູບພາບ, ແລະ ເຊື້ອເຊີນຄົນອື່ນໃຫ້ຮຽນຮູ້ຫລາຍຂຶ້ນກ່ຽວກັບຂ່າວສານຂອງພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່. ສະມາຊິກຄວນອະທິຖານເພື່ອຜູ້ຄົນທີ່ບໍ່ເປັນສະມາຊິກຂອງສາດສະໜາຈັກ. ເຂົາເຈົ້າຄວນອະທິຖານເພື່ອໂອກາດທີ່ຈະໄດ້ເຜີຍແຜ່ສາດສະໜາ—ເພື່ອຈະຮັບໃຊ້ຜູ້ທີ່ບໍ່ມີຄວາມເຊື່ອແບບດຽວກັບເຮົາ ແລະ ແບ່ງປັນສິ່ງທີ່ເຂົາເຈົ້າເຊື່ອ. ພະຜູ້ເປັນເຈົ້າສັນຍາທີ່ຈະຊ່ອຍສະມາຊິກໃຫ້ຮູ້ສິ່ງທີ່ຈະເວົ້າ ແລະ ເຮັດເມື່ອເຂົາເຈົ້າແບ່ງປັນພະກິດຕິຄຸນ.

### ການສຶກສາພະຄຳພີ

| | | |
|---|---|---|
| Jacob 5:70–75 | D&C 19:29 | D&C 84:74–76, 88 |
| Mosiah 28:3 | D&C 33:8–11 | D&C 88:81 |
| D&C 18:10–16 | D&C 38:40–42 | D&C 100:5–8 |

ໝາຍເຫດ

## ຄຳໝັ້ນສັນຍາ

- ທ່ານຈະຕຽມພ້ອມທີ່ຈະເຊື້ອເຊີນໝູ່ເພື່ອນ ແລະ ພີ່ນ້ອງຜູ້ທີ່ບໍ່ໄດ້ເປັນສະມາຊິກຂອງສາດສະໜາຈັກໃຫ້ມາພົບກັບຜູ້ສອນສາດສະໜາເພື່ອຈະໄດ້ຮັບການສິດສອນພະກິດຕິຄຸນບໍ?
- ທ່ານຈະອະທິຖານເພື່ອຜູ້ສອນສາດສະໜາ ແລະ ເພື່ອຈະມີໂອກາດທີ່ຈະແບ່ງປັນພະກິດຕິຄຸນບໍ?
- ທ່ານຈະຕຽມພ້ອມທີ່ຈະຮັບໃຊ້ເປັນຜູ້ສອນສາດສະໜາບໍ?

## ການແຕ່ງງານນິລັນດອນ

ໜ່ວຍພື້ນຖານຂອງສາດສະໜາຈັກແມ່ນຄອບຄົວ. ພາຍໃນຄອບຄົວ, ຜູ້ຄົນຈະປະສົບກັບຄວາມສຸກ ແລະ ຄວາມເສຍໃຈຕ່າງໆທີ່ຍິ່ງໃຫຍ່ທີ່ສຸດໃນຊີວິດ. ການແຕ່ງງານລະຫວ່າງຊາຍ ແລະ ຍິງໄດ້ແຕ່ງຕັ້ງຈາກພະເຈົ້າ ແລະ ເປັນສູນກາງຂອງແຜນນິລັນດອນຂອງພະເຈົ້າສຳລັບຄວາມລອດຂອງລູກໆຂອງພະອົງ. ການກຳເນີດຊີວິດມະຕະໄດ້ຕັ້ງຂຶ້ນໂດຍພະເຈົ້າ ແລະ ຖືກປ້ອງກັນໄວ້ໂດຍຜ່ານການແຕ່ງງານ. ແຜນແຫ່ງຄວາມສຸກອັນສັກສິດເຮັດໃຫ້ຄວາມສຳພັນຂອງຄອບຄົວສາມາດຍືນຍົງຕໍ່ໄປຫລັງຈາກການຕາຍທາງຮ່າງກາຍ. ເຖິງຢ່າງໃດກໍຕາມ, ການແຕ່ງງານສາມາດເປັນນິລັນດອນໄດ້ ພຽງແຕ່ເມື່ອຜູ້ດຳລົງອຳນາດຖານະປະໂລຫິດປະກອບພິທີຜະນຶກໃນພະວິຫານທີ່ສັກສິດ ແລະ ເມື່ອສາມີພັນລະຍາຜູ້ທີ່ໄດ້ຜະນຶກເຂົ້າກັນຮັກສາພັນທະສັນຍາທີ່ເຂົາເຈົ້າໄດ້ເຮັດໄວ້ເທົ່ານັ້ນ. ສາມີພັນລະຍາຕ້ອງຮັກກັນແລະກັນ. ໃນຂະນະທີ່ເຂົາເຈົ້າຮັກສາພະບັນຍັດ ແລະ ດຳລົງຊີວິດຕາມຫລັກທຳພະກິດຕິຄຸນ, ເຂົາເຈົ້າຕ້ອງໃຫ້ກຽດສັນຍາກ່ຽວກັບການແຕ່ງງານຂອງເຂົາເຈົ້າດ້ວຍຄວາມຊື່ສັດສຸດຈະລິດ (ເບິ່ງ "ຄອບຄົວ: ການປະກາດຕໍ່ໂລກ," *Ensign*, Nov. 1995, 102; ເບິ່ງ D&C 42:22 ນຳອີກ).

ຄວາມສຸກໃນຊີວິດຄອບຄົວຈະປະສົບຜົນສຳເລັດເມື່ອສ້າງຢູ່ເທິງພື້ນຖານຂອງຄຳສອນຂອງພະເຢຊູຄຣິດ ແລະ ເມື່ອພໍ່ແມ່ເຮັດໃຫ້ຄອບຄົວຂອງເຂົາເຈົ້າເປັນສິ່ງທີ່ສຳຄັນກ່ອນສິ່ງອື່ນໃດທັງໝົດ. "ໃນແຜນຂອງພະຜູ້ເປັນເຈົ້ານັ້ນແມ່ນວ່າ ພໍ່ຈະເປັນຜູ້ນຳພາຄອບຄົວດ້ວຍຄວາມຮັກ ແລະດ້ວຍຄວາມຊອບທຳ ແລະ ມີໜ້າທີ່ຮັບຜິດຊອບທີ່ຈະຈັດຫາສິ່ງຈຳເປັນຕ່າງໆ ແລະ ປົກປັກຮັກສາຄອບຄົວຂອງຕົນ. ຜູ້ເປັນແມ່ມີໜ້າທີ່ຮັບຜິດຊອບຕົ້ນຕໍທີ່ຈະລ້ຽງດູລູກເຕົ້າ. ໃນໜ້າທີ່ຮັບຜິດຊອບອັນສັກສິດນີ້, ພໍ່ແມ່ຕ້ອງໄດ້ຊ່ອຍກັນແລະກັນ ແລະ ເປັນຫຸ້ນສ່ວນທີ່ເທົ່າທຽມກັນ (*Ensign*, Nov. 1995, 102). ພໍ່ແມ່ຕ້ອງຊ່ອຍກັນສອນລູກຂອງຕົນກ່ຽວກັບພະກິດຕິຄຸນຂອງພະເຢຊູຄຣິດ ແລະ ຊ່ອຍເຂົາດຳລົງຊີວິດຕາມນັ້ນ.

ຊາຕານໄດ້ພະຍາຍາມສຸດຂີດທີ່ຈະໂຈມຕີຄອບຄົວ. ຫລາຍປີຜ່ານມາແລ້ວ ຜູ້ນຳຂອງສາດສະໜາຈັກໄດ້ຈັດໃຫ້ວັນຈັນຕອນແລງເປັນເວລາສຳລັບການສັງສັນໃນຄອບຄົວ. ພໍ່ແມ່ຄວນໃຊ້ເວລານີ້ເພື່ອສອນພະກິດຕິຄຸນແກ່ລູກຂອງຕົນ, ເຮັດໃຫ້ຄວາມສຳພັນກັບລູກເຂັ້ມແຂງຂຶ້ນ, ແລະ ມີຄວາມມ່ວນຊື່ນນຳກັນ. ວິທີໜຶ່ງອີກທີ່ເພີ່ມຄວາມເຂັ້ມແຂງໃນຄອບຄົວແມ່ນຮ່ວມດ້ວຍການອະທິຖານ ແລະ ການສຶກສາພະຄຳພີ ເປັນຄອບຄົວທຸກໆວັນ, ນະມັດສະການໃນໂບດເປັນຄອບຄົວ, ແລະ ຮັບໃຊ້ຄົນອື່ນໆ. ໃຫ້ສະຫວັນເປັນບ້ານໃນອຸດົມຄະຕິຕໍ່ໄປ. ຜ່ານພິທີການຖານະປະໂລຫິດ ແລະ ການດຳລົງຊີວິດຢ່າງຊອບທຳ, ເຮົາສາມາດຢູ່ເປັນຄອບຄົວໃນທີ່ປະທັບຂອງພະເຈົ້າໄດ້ຊົ່ວນິລັນດອນ.

## ການສຶກສາພະຄຳພີ

### ການແຕ່ງງານ

| | | |
|---|---|---|
| D&C 42:22 | D&C 132:7 | "ຄອບຄົວ: ການປະກາດຕໍ່ໂລກ" |
| D&C 49:15 | ປະຖົມມະການ 2:24 | |
| D&C 131:1–4 | ເອເຟໂຊ 5:25 | |

### ຄອບຄົວ

| | | |
|---|---|---|
| ໂມໄຊຢາ 4:14–15 | D&C 130:2 | "ຄອບຄົວ: ການປະກາດຕໍ່ໂລກ" |
| 3 ນີໄຟ 18:21 | 1 ຕີໂມທີ 5:8 | |

**ບົດຮຽນທີ 5:**
**ກົດ ແລະ ພິທີການ**

ໝາຍເຫດ

### ສອນເດັກນ້ອຍ

| | | |
|---|---|---|
| Alma 56:47 | Moses 6:55–62 | ເອເຟໂຊ 6:4 |
| Alma 57:21 | D&C 68:25–30 | ສຸພາສິດ 22:6 |

### ຄຳໝັ້ນສັນຍາ

- ທ່ານຈະຈັດການສັງສັນໃນຄອບຄົວທຸກໆອາທິດ, ມີການອະທິຖານເປັນຄອບຄົວທຸກໆວັນ, ມີການສຶກສາພະຄຳພີທຸກໆວັນ, ແລະ ມີກິດຈະກຳຕ່າງໆຂອງຄອບຄົວບໍ?
- ທ່ານຈະຕຽມພ້ອມທີ່ຈະໄປພະວິຫານເພື່ອ (1) ຮັບຂອງປະທານສັກສິດຂອງທ່ານບໍ? (2) ແຕ່ງງານສຳລັບການເວລາ ແລະ ຊົ່ວນິລັນດອນບໍ? (3) ຖ້າວ່າແຕ່ງງານແລ້ວ, ຈະຜະນຶກເຂົ້າກັນຊົ່ວນິລັນດອນໃນຖານະເປັນສາມີພັນລະຍາບໍ? ແລະ (4) ໃຫ້ລູກຂອງທ່ານຜະນຶກເຂົ້າກັບທ່ານບໍ?
- ທ່ານຈະນະມັດສະການເປັນຄອບຄົວໃນວັນຊະບາໂຕບໍ?
- ທ່ານຈະຮັບໃຊ້ຄົນອື່ນໆບໍ?

## ພະວິຫານ ແລະ ປະຫວັດຄອບຄົວ

ພະເຈົ້າໄດ້ບັນຊາຜູ້ຄົນຂອງພະອົງໃຫ້ສ້າງພະວິຫານ. ໃນພະວິຫານເຮົາໄດ້ເຮັດພັນທະສັນຍາອັນສັກສິດ ແລະ ຮັບເອົາຂອງປະທານສັກສິດ, ຫລືໄດ້ຮັບຂອງປະທານແຫ່ງພະລັງ ແລະ ຄວາມຮູ້ຈາກຊັ້ນສູງ. ພະລັງນີ້ຊ່ອຍເຮົາໃນຊີວິດປະຈຳວັນ ແລະ ເຮັດໃຫ້ເຮົາສາມາດສ້າງສາອານາຈັກຂອງພະເຈົ້າໄດ້. ໃນພະວິຫານເຮົາສາມາດແຕ່ງງານສຳລັບການເວລາ ແລະ ຊົ່ວນິລັນດອນ ເພື່ອວ່າຄອບຄົວຈະສາມາດຢູ່ຮ່ວມກັນຕະຫລອດໄປໃນທີ່ປະທັບຂອງພະເຈົ້າ. ຢ່າງໜ້ອຍທີ່ສຸດຫລັງຈາກທີ່ເປັນສະມາຊິກໄດ້ໜຶ່ງປີ, ຜູ້ໃຫຍ່ທີ່ມີຄ່າຄວນອາດເໝາະສົມທີ່ຈະໄດ້ຮັບໃບຮັບຮອງຈາກອະທິການຂອງເຂົາ ເພື່ອໄປຮັບຂອງປະທານສັກສິດສຳລັບຕົວເຂົາເອງ. ຫລັງຈາກໄດ້ຮັບຂອງປະທານສັກສິດຂອງເຂົາເອງແລ້ວ, ຄູ່ທີ່ແຕ່ງງານສາມາດຜະນຶກ ຫລື ແຕ່ງງານຊົ່ວນິລັນດອນໄດ້.

ພະຜູ້ຊ່ອຍໃຫ້ລອດຮັກທຸກໆຄົນ ແລະ ຢາກໃຫ້ເຂົາເຈົ້າໄດ້ຮັບຄວາມລອດ. ແຕ່ວ່າຄົນເປັນລ້ານໆໄດ້ຕາຍໄປປາດສະຈາກໂອກາດທີ່ຈະໄດ້ຍິນຂ່າວສານຂອງພະກິດຕິຄຸນທີ່ຖືກຟື້ນຟູຄືນມາໃໝ່ຂອງພະເຢຊູຄຣິດ ຫລືໄດ້ຮັບພິທີການແຫ່ງຄວາມລອດ. ຜ່ານພະຄຸນທີ່ຮັກ ແລະ ຄວາມເມດຕາຂອງພະອົງ, ພະຜູ້ເປັນເຈົ້າເຮັດໃຫ້ຄວາມລອດເປັນໄປໄດ້ສຳລັບທຸກຄົນຜູ້ທີ່ບໍ່ມີໂອກາດທີ່ຈະໄດ້ຮັບ, ເຂົ້າໃຈ, ແລະ ເຊື່ອຟັງພະກິດຕິຄຸນລະຫວ່າງຊີວິດມະຕະຂອງເຂົາ. ພະກິດຕິຄຸນຖືກສອນແກ່ຄົນເຫລົ່ານີ້ທີ່ຕາຍໄປແລ້ວໃນໂລກວິນຍານ. ສະມາຊິກຂອງສາດສະໜາຈັກໃນໂລກໄດ້ປະກອບພິທີການແຫ່ງການຊ່ອຍໃຫ້ລອດໃນນາມຂອງບັນພະບຸລຸດທີ່ຕາຍໄປແລ້ວ ແລະ ຄົນອື່ນໆ. ຜູ້ຢູ່ໃນໂລກວິນຍານໄດ້ມີໂອກາດທີ່ຈະຮັບ ຫລື ປະຕິເສດພະກິດຕິຄຸນ ແລະ ພິທີການທີ່ເຮັດໃນນາມຂອງເຂົາ.

ດ້ວຍເຫດນີ້, ສະມາຊິກຂອງສາດສະໜາຈັກຈຶ່ງຊອກຫາຂໍ້ມູນກ່ຽວກັບບັນພະບຸລຸດຂອງເຂົາເຈົ້າ. ເຂົາເຈົ້າໄດ້ຂຽນໃບບັນທຶກລຳດັບເຊື້ອສາຍ ແລະ ບັນທຶກຄອບຄົວໃຫ້ແລ້ວ ແລະ ສົ່ງລາຍຊື່ຂອງພີ່ນ້ອງທີ່ຕາຍ ຜູ້ທີ່ຕ້ອງການຄົນອື່ນໃຫ້ປະຕິບັດພິທີການແຫ່ງການຊ່ອຍໃຫ້ລອດແທນເຂົາໃນພະວິຫານອັນສັກສິດ. ນີ້ແມ່ນວຽກງານສືບປະຫວັດຄອບຄົວ. ສະມາຊິກທີ່ມີຄ່າຄວນອາຍຸ 12 ປີ ແລະ ໃຫຍ່ກວ່ານັ້ນ, ພ້ອມດ້ວຍສະມາຊິກໃໝ່, ສາມາດຮັບໃບຮັບຮອງຈາກອະທິການຂອງເຂົາເພື່ອຮັບບັບຕິດສະມາແທນຄົນຕາຍ.

### ປະຫວັດຄອບຄົວ

ເຊື້ອເຊີນສະມາຊິກໃໝ່ໃຫ້ເວົ້າລົມກັບສະມາຊິກຄົນໃດຄົນໜຶ່ງ ຫລື ໄປຫາສູນກາງສືບປະຫວັດຄອບຄົວໃນທ້ອງຖິ່ນ (ບ່ອນທີ່ມີ) ສຳລັບຄຳແນະນຳກ່ຽວກັບວຽກສືບປະຫວັດຄອບຄົວ ແລະ ສຳລັບແຫລ່ງຊ່ອຍເຫລືອທີ່ມີໄວ້ໃຫ້ເຂົາເຈົ້າ. ຈັດຫາໃບປະຫວັດຄອບຄົວໃຫ້ເຂົາເຈົ້າ.

ໝາຍເຫດ

## ການສຶກສາພະຄຳພີ

| | | | |
|---|---|---|---|
| D&C 43:16 | D&C 128 | D&C 138 | 1 ໂກລິນໂທ 15:29 |
| D&C 95:8–9 | D&C 131 | ເພງສັນລະເສີນ 65:4 | Brochure, *Welcome to the Family History Center* |
| D&C 124:22–42 | D&C 132 | 1 ເປໂຕ 3:18–21 | |

## ຄຳໝັ້ນສັນຍາ

- ທ່ານຈະຕຽມພ້ອມເພື່ອຮັບພິທີການແຫ່ງພະວິຫານບໍ? (ຫລັງຈາກການຮັບບັບຕິດສະມາ ແລະ ການຢືນຢັນໄດ້ບໍ່ດົນ, ສະມາຊິກທີ່ມີຄ່າຄວນອາຍຸສູງກວ່າ 12 ປີ ສາມາດຮັບໃບຮັບຮອງເຂົ້າພະວິຫານ ແລະ ໄປຮັບບັບຕິດສະມາແທນຄົນຕາຍໄດ້.)
- ທ່ານຈະເຮັດວຽກສືບປະຫວັດຄອບຄົວບໍ ແລະ ສົ່ງຊື່ຂອງບັນພະບຸລຸດເພື່ອຮັບພິທີການແຫ່ງພະວິຫານ?

## ການຮັບໃຊ້

ພອນທີ່ຍິ່ງໃຫຍ່ອີກຢ່າງໜຶ່ງຂອງການເປັນສະມາຊິກໃນສາດສະໜາຈັກແມ່ນໂອກາດທີ່ຈະຮັບໃຊ້. ເມື່ອເຮົາຮັບໃຊ້ດ້ວຍຄວາມຮັກຕໍ່ຄົນອື່ນ, ເຮົາຮັບໃຊ້ພະເຈົ້າ. ເວລາເຮົາຮັບບັບຕິດສະມາ, ເຮົາໄດ້ເຮັດພັນທະສັນຍາວ່າເຮົາຈະຮັບໃຊ້ (ເບິ່ງ ໂມໄຊຢາ 18:8–10). ເຮົາຕ້ອງຮູ້ຄວາມຕ້ອງການທາງຮ່າງກາຍ ແລະ ທາງວິນຍານຂອງຄົນອື່ນ. ຕໍ່ຈາກນັ້ນ ເຮົາໃຫ້ເວລາ, ພອນສະຫວັນ, ແລະ ສິ່ງຂອງເພື່ອຊ່ອຍສະໜອງຄວາມຕ້ອງການເຫລົ່ານັ້ນ. ເຮົາເຮັດຕາມຕົວຢ່າງຂອງພະຜູ້ຊ່ອຍໃຫ້ລອດ, ຜູ້ທີ່ໄດ້ມາຮັບໃຊ້ຄົນອື່ນ. ເຮົາຕ້ອງເຮັດສິ່ງທີ່ພະເຢຊູໄດ້ເຮັດ ແລະ ກາຍເປັນເໝືອນດັ່ງພະອົງ.

ຫລັງຈາກຮັບບັບຕິດສະມາໄດ້ບໍ່ດົນ ສະມາຊິກໃໝ່ຈະໄດ້ຮັບພອນຈາກຜູ້ນຳຖານະປະໂລຫິດ ໃນການຮັບເອົາໜ້າທີ່ຮັບຜິດຊອບເພື່ອຊ່ອຍເຫລືອໃນສາດສະໜາຈັກ. ນີ້ອ້າງເຖິງການເອີ້ນ. ວຽກງານທັງໝົດໃນສາດສະໜາຈັກແມ່ນອາສາສະໝັກ. ບໍ່ມີໃຜໄດ້ຄ່າແຮງງານໃນການຮັບໃຊ້ນີ້. ເມື່ອເຮົາຍອມຮັບການເອີ້ນ, ເຮົາໄດ້ຖືກສະໜັບສະໜູນຢ່າງເປີດເຜີຍໃນກອງປະຊຸມໂບດເພື່ອວ່າຄົນອື່ນໆ ຈະໄດ້ຮັບຮູ້ການເອີ້ນຂອງເຮົາ ແລະ ໃຫ້ການຊຸກຍູ້. ພ້ອມນີ້ເຮົາຈະໄດ້ຮັບການແຕ່ງຕັ້ງເປັນທາງການໂດຍຜູ້ນຳຖານະປະໂລຫິດ ແລະ ໃຫ້ພອນພິເສດເພື່ອຊ່ອຍເຮົາເຮັດໜ້າທີ່ຂອງເຮົາໃຫ້ສຳເລັດ. ສາດສະໜາຈັກຕ້ອງການພອນສະຫວັນ ແລະ ຄວາມສາມາດຂອງສະມາຊິກທຸກຄົນເພື່ອຕື່ມໃສ່ການເອີ້ນຕ່າງໆໃຫ້ເຕັມ. ການເອີ້ນທັງໝົດສຳຄັນ ແລະ ເປັນການຊ່ອຍສ້າງອານາຈັກຂອງພະເຈົ້າ. ເຮົາຕ້ອງຍອມຮັບການເອີ້ນເຊັ່ນນີ້ ແລະ ເຮັດວຽກດ້ວຍຄວາມຕັ້ງໃຈເພື່ອຮຽນຮູ້ ແລະ ເຮັດໜ້າທີ່ຂອງເຮົາໃຫ້ສຳເລັດ. ຂະນະທີ່ເຮົາເຮັດແບບນັ້ນ, ເຮົາໄດ້ເຕີບໂຕໃນສັດທາ, ໄດ້ພັດທະນາພອນສະຫວັນອັນໃໝ່ ແລະ ຄວາມສາມາດທີ່ຈະຮັບໃຊ້ຫລາຍຂຶ້ນ, ແລະ ໄດ້ຮັບພອນຕ່າງໆຢ່າງຫລວງຫລາຍ.

ຜູ້ດຳລົງຖານະປະໂລຫິດຈະຖືກເອີ້ນໃຫ້ເປັນຄູສອນປະຈຳບ້ານ. ຄູສອນປະຈຳບ້ານຈະໄປຢ້ຽມຢາມຄອບຄົວສະມາຊິກທີ່ເຂົາເຈົ້າຖືກມອບໝາຍຢ່າງໜ້ອຍເດືອນລະເທື່ອ. ເຂົາເຈົ້າຈະສອນພະກິດຕິຄຸນ, ສະໜັບສະໜູນຜູ້ເປັນພໍ່ແມ່, ຜູກມິດ, ແລະ ຊ່ອຍຄອບຄົວຕຽມຮັບ ແລະ ຮັກສາພັນທະສັນຍາຂອງພະວິຫານ. ຜູ້ຢ້ຽມສອນທີ່ເປັນຕົວແທນໃຫ້ສະມາຄົມສະຕີສົງເຄາະ ຈະໄປຢ້ຽມຢາມສະຕີແຕ່ລະຄົນຜູ້ທີ່ເຂົາເຈົ້າຖືກມອບໝາຍເດືອນລະເທື່ອ.

## ການສຶກສາພະຄຳພີ

**ຄວາມໃຈບຸນ**

| | | | |
|---|---|---|---|
| ໂມໂລໄນ 7:43–48 | D&C 88:125 | ມັດທາຍ 22:36–40 | 1 ໂກລິນໂທ 13:1–8 |

**ການດູແລຄົນຍາກຈົນ**

| | | | |
|---|---|---|---|
| ໂມໄຊຢາ 4:26 | ແອລະມາ 34:28–29 | D&C 52:40 | ມັດທາຍ 25:40 |

**ເຮົາຕ້ອງຮັບໃຊ້**

| | | | |
|---|---|---|---|
| ໂມໄຊຢາ 2:17 | ໂມໄຊຢາ 18:8–10 | D&C 42:29 | D&C 107:99–100 |

ບົດຮຽນທີ 5:
ກົດ ແລະ ພິທີການ

ໝາຍເຫດ

### ຄຳໝັ້ນສັນຍາ

- ທ່ານຈະຍອມຮັບ ແລະ ເຮັດໜ້າທີ່ການເອີ້ນ (ຮ່ວມດ້ວຍການມອບໝາຍໃຫ້ເປັນຄູສອນປະຈຳບ້ານ ຫລື ຜູ້ປ້ຽມສອນ) ໃຫ້ສຳເລັດບໍ?
- ທ່ານຈະຊຸກຍູ້ຄົນອື່ນໃນການເອີ້ນຂອງເຂົາເຈົ້າບໍ?

## ການສອນ ແລະ ການຮຽນຮູ້ ໃນສາດສະໜາຈັກ

ສາດສະໜາຈັກໄດ້ຖືກຕັ້ງຂຶ້ນເພື່ອໃຫ້ພອນແກ່ຊີວິດຂອງສະມາຊິກທັງຫລາຍ ແລະ ເຮັດໃຫ້ເຂົາເຈົ້າດີພ້ອມ. ມັນໃຫ້ໂອກາດເຮົາທີ່ຈະສອນພະກິດຕິຄຸນ, ຊ່ອຍເຫລືອ ແລະ ຮັບໃຊ້ກັນແລະກັນ, ແລະ ຊຸກຍູ້ກັນໃນການສະແຫວງຫາຄວາມລອດ. ໃນຄອບຄົວ ແລະ ຜ່ານສາດສະໜາຈັກ, ສະມາຊິກແຕ່ລະຄົນໄດ້ຮຽນຄຳສອນຂອງພະກິດຕິຄຸນ. ເມື່ອສະມາຊິກໄດ້ຖືກເອີ້ນໃຫ້ເປັນຜູ້ສອນ, ເຂົາເຈົ້າໄດ້ຮັບອຸບປະກອນການສອນ ແລະ ໄດ້ຮັບການຊ່ອຍເຫລືອເພື່ອເຮັດໃຫ້ເຂົາເຈົ້າສາມາດປະສົບຜົນສຳເລັດ.

### ການສຶກສາພະຄຳພີ

D&C 88:77–79     ເອເຟໂຊ 4:11–14

### ຄຳໝັ້ນສັນຍາ

- ທ່ານຈະໄປໂບດບໍ?

## ອົດທົນຈົນເຖິງທີ່ສຸດ

ຂະນະທີ່ເຮົາດຳລົງຊີວິດຕາມພະກິດຕິຄຸນຕໍ່ໄປ, ເຮົາເຂົ້າໃກ້ພະບິດາເທິງສະຫວັນຂອງເຮົາຫລາຍຂຶ້ນ. ເຮົາຊື່ນຊົມ ແລະ ຮູ້ຄຸນຄ່າຂອງການຊົດໃຊ້ຂອງພະຜູ້ຊ່ອຍໃຫ້ລອດຫລາຍຂຶ້ນ. ຄອບຄົວຂອງເຮົາໃກ້ຊິດກັນຫລາຍຂຶ້ນ. ເຮົາປະສົບການຄວາມຮູ້ສຶກຂອງຄວາມຮັກ, ຄວາມປິຕິຍິນດີ, ແລະ ຄວາມສະຫງົບທີ່ມາຈາກການຊົດໃຊ້ຫລາຍຂຶ້ນ. ຫົວໃຈຂອງເຮົາປ່ຽນແປງ, ແລະ ເຮົາພົບຄວາມໝັ້ນຄົງໃນການດຳລົງຊີວິດຕາມພະກິດຕິຄຸນທີ່ໄດ້ຖືກຟື້ນຟູ.

ເມື່ອເຮົາໃຊ້ສັດທາໃນພະຄິດ, ກັບໃຈ, ແລະ ຕໍ່ພັນທະສັນຍາຂອງເຮົາຕໍ່ໄປ, ເຮົາຈະຊື່ນຊົມກັບການນຳພາຈາກພະວິນຍານບໍລິສຸດຕໍ່ໄປ. ຖ້າວ່າເຮົາອົດທົນຈົນເຖິງທີ່ສຸດໃນຊີວິດຂອງເຮົາ ໃນຄວາມຈິງໃຈຕໍ່ພັນທະສັນຍາຂອງເຮົາ, ແລ້ວເຮົາຈະໄດ້ຮັບຊີວິດນິລັນດອນ.

ສະມາຊິກສ່ວນໜ້ອຍບໍ່ມີຄວາມອົດທົນ ຫລື ບໍ່ເຂັ້ມແຂງ. ເຖິງຢ່າງໃດກໍຕາມ, ການອົດທົນຈົນເຖິງທີ່ສຸດເປັນຄວາມຮັບຜິດຊອບສ່ວນຕົວ. ເຮົາ "ບັນລຸເຖິງຄວາມພົ້ນ [ຂອງເຮົາເອງ]" (ຟີລິບປີ 2:12), ແລະ ເຮົາຮັບໃຊ້ ແລະ ຮັກຜູ້ທີ່ສັດທາໄດ້ອ່ອນແອລົງຜ່ານການເປັນສະມາຊິກທີ່ບໍ່ເຂັ້ມແຂງ.

### ການສຶກສາພະຄຳພີ

| | | | |
|---|---|---|---|
| 2 ນີໄຟ 31:20–21 | D&C 20:37 | ໂຢຮັນ 14:15, 21 | ຟີລິບປີ 2:12 |
| ໂມໂລໄນ 6:4 | ຫລັກແຫ່ງຄວາມເຊື່ອ 1:3 | ເອເຟໂຊ 4:11–14 | |

### ຄຳໝັ້ນສັນຍາ

- ທ່ານຈະດຳລົງຊີວິດຕາມພະກິດຕິຄຸນໂດຍການຮັກສາພັນທະສັນຍາແຫ່ງການບັບຕິສະມາຕະຫລອດຊີວິດຂອງທ່ານຕໍ່ໄປບໍ?



# ເຮົາຈະຮູ້ຈັກ ແລະ ເຂົ້າໃຈ ພະວິນຍານໄດ້ແນວໃດ?

ໝາຍເຫດ

## ໃຫ້ພິຈາລະນາເລື່ອງນີ້

- ເປັນຫຍັງເຮົາຈຳເປັນຕ້ອງໄດ້ຮັບການເປີດເຜີຍສ່ວນຕົວ?
- ພະວິນຍານບໍລິສຸດແມ່ນໃຜ ແລະ ພະອົງເຮັດວຽກງານຂອງພະອົງແນວໃດ?
- ເປັນຫຍັງເຮົາຕ້ອງອະທິຖານດ້ວຍສັດທາ?
- ບົດບາດຂອງພະວິນຍານແມ່ນຫຍັງໃນວຽກງານການເຜີຍແຜ່?
- ເຮົາຈະຮູ້ຈັກການກະຕຸ້ນຂອງພະວິນຍານໄດ້ແນວໃດ?

## ການເປີດເຜີຍສ່ວນຕົວ

ໂຢເຊັບ ສະມິດ ໄດ້ກ່າວວ່າ, "ຄວາມລອດບໍ່ສາມາດເກີດຂຶ້ນປາດສະຈາກການເປີດເຜີຍ; ຈະບໍ່ມີປະໂຫຍດຕໍ່ທຸກຄົນທີ່ຈະຮັບໃຊ້ປາດສະຈາກການເປີດເຜີຍ" (*History of the Church*, 3:389). ທ່ານຈະມີຜົນສຳເລັດໃນວຽກງານຂອງທ່ານ, ເມື່ອທ່ານຮຽນຮູ້ທີ່ຈະຮັບ ແລະ ເຮັດຕາມການເປີດເຜີຍສ່ວນຕົວ. ໂຢເຊັບ ສະມິດ ໄດ້ສອນອີກຢ່າງໜຶ່ງວ່າ ການເປີດເຜີຍເປັນສິ່ງສຳຄັນຕໍ່ວຽກງານປະຈຳວັນຂອງທ່ານ: "ນີ້ແມ່ນຫລັກທຳເຊິ່ງລັດຖະບານແຫ່ງສະຫວັນໃຊ້ເພື່ອນຳພາ—ໂດຍການເປີດເຜີຍທີ່ໄດ້ດັດແປງຕາມສະພາບການຂອງລູກໆແຫ່ງອານາຈັກ" (*History of the Church*, 5:135).

ພະເຈົ້າຮັກທ່ານ ແລະ ຮັກລູກໆທັງໝົດຂອງພະອົງ. ພະອົງກະຕືລືລົ້ນທີ່ຈະອູ້ມຊູທ່ານໃນການກະທຳ ແລະ ສິ່ງທ້າທາຍອັນພິເສດຂອງທ່ານ. ທ່ານໄດ້ຖືກສັນຍາວ່າຈະໄດ້ຮັບການດົນໃຈ ເພື່ອຈະໄດ້ຮູ້ສິ່ງທີ່ຈະເຮັດ ແລະ ໄດ້ຮັບອຳນາດເພື່ອຈະເຮັດມັນ (see D&C 43:15–16). ພະອົງຈະຊ່ອຍເຫລືອທ່ານເມື່ອທ່ານຮູ້ຈັກ ແລະ ເຂົ້າໃຈພະວິນຍານ ຜ່ານການສຶກສາພະຄຳພີຢ່າງພາກພຽນ. ພະອົງຈະນຳພາທ່ານໄປຫາຄົນຜູ້ທີ່ຈະຮັບເອົາຂ່າວສານຂອງການຟື້ນຟູ. ພະອົງຈະໃຫ້ອຳນາດແກ່ທ່ານເພື່ອປະກາດຂ່າວສານ ແລະ ເປັນພະຍານກ່ຽວກັບພະຄຣິດ ແລະ ພະກິດຕິຄຸນຂອງພະອົງ. ພະອົງຈະໃຫ້ພອນແກ່ທ່ານຢ່າງຫລວງຫລາຍຜ່ານຂອງປະທານແຫ່ງພະວິນຍານບໍລິສຸດ. ພະອົງຂໍໃຫ້ທ່ານມີຄ່າຄວນສຳລັບຂອງປະທານນີ້ຕໍ່ໄປ ແລະ ວ່າທ່ານຈະຖາມ, ສະແຫວງຫາ ແລະ ເຄາະ (see D&C 4:7; ເບິ່ງ ມັດທາຍ 7:7–8).

ເຮົາມີຊີວິດຢູ່ໃນວັນເວລາທີ່ສາດສະດາທັງຫລາຍໃນພະຄຳພີມໍມອນໄດ້ພະຍາກອນໄວ້—ເປັນວັນເວລາເມື່ອຜູ້ຄົນຈະ "ຂັດແຍ້ງກັນ ແລະ ເຂົາຈະສອນດ້ວຍການຮຽນຮູ້ຂອງເຂົາ ແລະ ປະຕິເສດພະວິນຍານບໍລິສຸດທີ່ປະທານການປາກເວົ້າ"

ໝາຍເຫດ

(2 Nephi 28:4; ເບິ່ງ 3 ນີໄຟ 29:6 ນຳອີກ; ມໍມອນ 9:7–8). ແຕ່ວ່າຫລາຍໆຄົນຍັງສະແຫວງຫາສິ່ງທີ່ເປັນທາງວິນຍານຢູ່. ເມື່ອທ່ານຮຽນຮູ້ເພື່ອຮັບການເປີດເຜີຍສ່ວນຕົວ, ທ່ານຈະສອນດ້ວຍພະລັງ ແລະ ອຳນາດ (ເບິ່ງ ແອລະມາ 17:3) ເພາະພະວິນຍານບໍລິສຸດໃຫ້ອຳນາດທ່ານທີ່ຈະເວົ້າ (see 1 Nephi 10:22).

ທ່ານຕ້ອງສະແຫວງຫາ ແລະ ຮັບການເປີດເຜີຍສ່ວນຕົວຜ່ານພະວິນຍານບໍລິສຸດເມື່ອທ່ານຊ່ອຍເຫລືອຜູ້ຄົນໃຫ້ຮັບບັບຕິດສະມາ ແລະ ຮັບການຢືນຢັນ. ຈົ່ງມີສັດທາວ່າທ່ານຈະໄດ້ຮັບການເປີດເຜີຍສ່ວນຕົວເພື່ອນຳພາທ່ານ ຈາກມື້ຕໍ່ມື້. ພະວິນຍານບໍລິສຸດຈະຊ່ອຍເຫລືອທ່ານໃນທຸກໆພາກສ່ວນຂອງວຽກງານຂອງທ່ານ.

**ກິດຈະກຳ: ການສຶກສາສ່ວນຕົວ**

ໃນການສະຫລຸບປະຈັກພະຍານຂອງ ໂມໂລໄນ, ເພິ່ນຂຽນວ່າ "ສອງສາມຄຳເປັນການແນະນຳ" (ໂມໂລໄນ 10:2). ອ່ານ ໂມໂລໄນ 10 ແລະ ຂຽນໃນຄຳເວົ້າຂອງທ່ານເອງວ່າ ໂມໂລໄນ ໄດ້ແນະນຳໃຫ້ຜູ້ທີ່ອ່ານພະຄຳພີມໍມອນເຮັດຫຍັງ. (*ແນະນຳ* ໝາຍຄວາມວ່າຊຸກຍູ້ຢ່າງໜັກແໜ້ນ ຫລື ສົ່ງເສີມໃຫ້ຄົນ ຄົນໜຶ່ງເຮັດສິ່ງໃດສິ່ງໜຶ່ງ.)

## ແສງສະຫວ່າງຂອງພະຄິດ

ຄົນ ຄົນໜຶ່ງສາມາດໄດ້ຮັບການນຳພາທາງວິນຍານກ່ອນຈະໄດ້ຮັບບັບຕິດສະມາ ແລະ ຮັບການຢືນຢັນ. ອິດທິພົນທາງວິນຍານນີ້ເລີ່ມຕົ້ນດ້ວຍແສງສະຫວ່າງຂອງພະຄິດ, ເຊິ່ງມອບໃຫ້ທຸກຄົນ ເພື່ອເຂົາຈະຮູ້ຄວາມດີຈາກຄວາມຊົ່ວ" (ໂມໂລໄນ 7:16; ເບິ່ງຂໍ້ 14–19 ນຳອີກ).

ແສງສະຫວ່າງຂອງພະຄິດຄື "ພະລັງທີ່ສັກສິດ, ອຳນາດ, ຫລື ອິດທິພົນທີ່ດຳເນີນການຈາກພະເຈົ້າຜ່ານພະຄິດ ແລະ ມອບຊີວິດ ແລະ ແສງສະຫວ່າງແກ່ທຸກສິ່ງທຸກຢ່າງ. ເປັນກົດທີ່ທຸກສິ່ງທຸກຢ່າງຖືກປົກຄອງໃນສະຫວັນ ແລະ ໃນໂລກ. ມັນຍັງໄດ້ຊ່ອຍເຫລືອຜູ້ຄົນໃຫ້ເຂົ້າໃຈຄວາມຈິງຂອງພະກິດຕິຄຸນ ແລະ ຊ່ອຍເຫລືອໃຫ້ເຂົາເຈົ້າເຂົ້າສູ່ເສັ້ນທາງຂອງພະກິດຕິຄຸນເຊິ່ງນຳສູ່ຄວາມລອດນຳອີກ.

"ແສງສະຫວ່າງຂອງພະຄິດບໍ່ແມ່ນພະວິນຍານບໍລິສຸດ. ແສງສະຫວ່າງຂອງພະຄິດບໍ່ແມ່ນເປັນຕົນເປັນຕົວ. ມັນເປັນອິດທິພົນທີ່ມາຈາກພະເຈົ້າ ແລະ ຕຽມຄົນ ຄົນໜຶ່ງໃຫ້ໄດ້ຮັບພະວິນຍານບໍລິສຸດ. ມັນເປັນອິດທິພົນຂອງຄວາມດີໃນຊີວິດຂອງຄົນທັງປວງ.

"ການສະແດງຢ່າງໜຶ່ງຂອງແສງສະຫວ່າງຂອງພະຄິດແມ່ນການຮູ້ຄວາມດີ ແລະ ຄວາມຊົ່ວ, ເຊິ່ງຊ່ອຍໃຫ້ຄົນເລືອກລະຫວ່າງຖືກ ແລະ ຜິດ. ເມື່ອຜູ້ຄົນຮຽນຮູ້ກ່ຽວກັບພະກິດຕິຄຸນຫລາຍຂຶ້ນ, ເຂົາເຈົ້າຮູ້ສຶກໄວຕໍ່ຄວາມຮູ້ສຶກຊົ່ວດີ. ຜູ້ຄົນທີ່ເຊື່ອຟັງຕໍ່ແສງສະຫວ່າງຂອງພະຄິດ ຈະຖືກນຳໄປສູ່ພະກິດຕິຄຸນຂອງພະເຢຊູຄິດ" (The Guide to the Scriptures, "Light, Light of Christ;" see also D&C 84:46–47).

ປະທານ ບອຍ ເຄ ແພັກເກີ ໄດ້ກ່າວວ່າ, "ມັນເປັນສິ່ງສຳຄັນທີ່ . . . ຜູ້ສອນສາດສະໜາ . . . ຈະຮູ້ວ່າພະວິນຍານບໍລິສຸດສາມາດດຳເນີນງານຜ່ານແສງສະຫວ່າງຂອງພະຄິດ. ຄູຜູ້ສອນຄວາມຈິງກ່ຽວກັບພະກິດຕິຄຸນ ບໍ່ໄດ້ສອນສິ່ງທີ່ແປກປະຫລາດ ຫລື ສິ່ງໃໝ່ຕໍ່ຜູ້ໃຫຍ່ ຫລື ເດັກນ້ອຍ ແຕ່ຜູ້ສອນສາດສະໜາ ຫລື ຄູຈະມີພະວິນຍານຂອງພະຄິດສະຖິດຢູ່ນຳໃນຕອນທີ່ກຳລັງສອນ. ຜູ້ຄົນຈະຮູ້ສຶກວ່າ ເຂົາເຈົ້າເຄີຍໄດ້ຍິນພະກິດຕິຄຸນນັ້ນມາກ່ອນແລ້ວ" ("The Light of Christ," address delivered at the seminar for new mission presidents, 22 June 2004, 2).

## ພະວິນຍານບໍລິສຸດ

**ພະວິນຍານບໍລິສຸດຄືບຸກຄົນ.** ພະວິນຍານບໍລິສຸດຄືສະມາຊິກຜູ້ທີສາມໃນຝ່າຍພະເຈົ້າ. ພະອົງຄືບຸກຄົນແຫ່ງວິນຍານ ແລະ ບໍ່ມີຮ່າງກາຍທີ່ມີເນື້ອໜັງ ແລະ ກະດູກ (see D&C 130:22). ພະອົງເປັນພະຜູ້ປອບໂຍນ, ຜູ້ທີ່ພະຜູ້ຊ່ອຍໃຫ້ລອດໄດ້ສັນຍາວ່າຈະສອນທຸກສິ່ງທຸກຢ່າງຕໍ່ຜູ້ຕິດຕາມພະອົງ ແລະ ເຮັດໃຫ້ເຂົາເຈົ້າຈື່ຈຳທຸກສິ່ງທຸກຢ່າງທີ່ພະອົງໄດ້ສອນໃຫ້ເຂົາເຈົ້າ (ເບິ່ງ ໂຢຮັນ 14:26).

**ອຳນາດຂອງພະວິນຍານບໍລິສຸດ.** ຄືປະຈັກພະຍານທີ່ມາສູ່ຜູ້ສົນໃຈທີ່ຈິງໃຈກ່ອນການຮັບບັບຕິດສະມາຜ່ານອຳນາດຂອງພະວິນຍານບໍລິສຸດ. "ອຳນາດຂອງພະວິນຍານບໍລິສຸດສາມາດມາສູ່ຄົນ ຄົນໜຶ່ງກ່ອນການຮັບບັບຕິດສະມາ ແລະ

ເປັນພະຍານວ່າພະກິດຕິຄຸນແມ່ນຄວາມຈິງ" (The Guide to the Scriptures, "Holy Ghost"). ອຳນາດນີ້ເຮັດໃຫ້ຄົນມີປະຈັກພະຍານເຖິງພະເຢຊູຄຣິດ ແລະ ກ່ຽວກັບວຽກງານຂອງພະອົງ ແລະ ວຽກງານຂອງຜູ້ຮັບໃຊ້ທັງຫລາຍຂອງພະອົງຢູ່ໃນໂລກ. ພະວິນຍານບໍລິສຸດເປັນພະຍານກ່ຽວກັບຄວາມຈິງ. ຜູ້ຄົນທັງໝົດສາມາດຮູ້ຄວາມຈິງຂອງພະຄຳພີມໍມອນໄດ້ຜ່ານທາງອຳນາດແຫ່ງພະວິນຍານບໍລິສຸດ. "ໂດຍອຳນາດຂອງພະວິນຍານບໍລິສຸດ ທ່ານຈະຮູ້ຄວາມຈິງຂອງທຸກເລື່ອງ" (ໂມໂລໄນ 10:5).

**ຂອງປະທານແຫ່ງພະວິນຍານບໍລິສຸດ.** ຜູ້ສົນໃຈຜູ້ທີ່ໄດ້ຮັບປະຈັກພະຍານຍັງບໍ່ທັນໄດ້ຮັບຄຳສັນຍາວ່າຈະມີພະວິນຍານບໍລິສຸດເປັນເພື່ອນທີ່ໃກ້ຊິດສະເໝີ. ໂຈເຊັບ ສະມິດ ໄດ້ກ່າວວ່າ: "ມີສິ່ງແຕກຕ່າງລະຫວ່າງພະວິນຍານບໍລິສຸດ ແລະ ຂອງປະທານແຫ່ງພະວິນຍານບໍລິສຸດ. ໂກເນລິໂອ ໄດ້ຮັບພະວິນຍານບໍລິສຸດກ່ອນທີ່ເພິ່ນໄດ້ຮັບບັບຕິດສະມາ, ເຊິ່ງແມ່ນອຳນາດທີ່ເປັນຕາເຊື່ອຂອງພະເຈົ້າທີ່ເພິ່ນໄດ້ຮັບກ່ຽວກັບຄວາມຈິງຂອງພະກິດຕິຄຸນ ແຕ່ວ່າເພິ່ນບໍ່ສາມາດໄດ້ຮັບຂອງປະທານແຫ່ງພະວິນຍານບໍລິສຸດຈົນກວ່າເພິ່ນໄດ້ຮັບບັບຕິດສະມາ. ຖ້າເພິ່ນບໍ່ໄດ້ຮັບເອົາຄຳສັນຍານ ຫລື ພິທີການນັ້ນໄວ້, ແລ້ວພະວິນຍານບໍລິສຸດເຊິ່ງເກີ້ຍກ່ອມເພິ່ນກ່ຽວກັບຄວາມຈິງຂອງພະເຈົ້າ ຈະໜີຈາກເພິ່ນໄປ" (*History of the Church*, 4:555).

"... ເມື່ອຄົນ ຄົນໜຶ່ງມີຄ່າຄວນ ແລະ ມີສິດທີ່ຈະໄດ້ຮັບພະວິນຍານບໍລິສຸດມາເປັນເພື່ອນທີ່ໃກ້ຊິດສະເໝີ ມັນເປັນຂອງປະທານທີ່ສາມາດຮັບໄດ້ພຽງແຕ່ໂດຍການວາງມືໂດຍຜູ້ດຳລົງຖານະປະໂລຫິດແຫ່ງເມນຄີເສເດັກເທົ່ານັ້ນຫລັງຈາກໄດ້ຮັບບັບຕິດສະມາທີ່ຖືກອະນຸຍາດໃຫ້ເຂົ້າຮ່ວມສາດສະໜາຈັກຂອງພະເຢຊູຄຣິດທີ່ແທ້ຈິງ" (The Guide to the Scriptures, "Holy Ghost").

> *"ຂອງປະທານແຫ່ງພະວິນຍານບໍລິສຸດມາສູ່ຫລັງຈາກຄົນຄົນໜຶ່ງໄດ້ກັບໃຈ ແລະ ມີຄ່າຄວນ. . . . ພະວິນຍານບໍລິສຸດໄດ້ສະແດງປະຈັກພະຍານເຖິງຄວາມຈິງ ແລະ ສະແດງອອກຕໍ່ຈິດວິນຍານເຖິງຄວາມຈິງກ່ຽວກັບພະເຈົ້າອົງເປັນພະບິດາ ແລະ ພະບຸດພະເຢຊູຄຣິດຢ່າງເລິກຊຶ້ງວ່າບໍ່ມີພະລັງ ຫລື ອຳນາດໃດໃນໂລກຈະສາມາດແຍກເຂົາຈາກຄວາມຮູ້ນັ້ນໄດ້."*
>
> – ປະທານ ເຈມ ອີ ຟາວ
>
> "THE GIFT OF THE HOLY GHOST—A SURE COMPASS," *ENSIGN*, APR. 1996, 4.

ໃນຖານະເປັນສະມາຊິກຂອງສາດສະໜາຈັກ, ທ່ານໄດ້ຮັບຂອງປະທານແຫ່ງພະວິນຍານບໍລິສຸດໂດຍອຳນາດຖານະປະໂລຫິດ. ຂອງປະທານນີ້ໃຫ້ສິດທິແກ່ທ່ານໃນການມີພະວິນຍານບໍລິສຸດເປັນເພື່ອນທີ່ໃກ້ຊິດສະເໝີ ເມື່ອທ່ານຍັງມີຄ່າຄວນທີ່ຈະມີມັນ. ຈົ່ງອະທິຖານສຳລັບການນຳພາຂອງພະວິນຍານ, ແລະ ເຮັດຕາມການກະຕຸ້ນທີ່ທ່ານໄດ້ຮັບຢ່າງກ້າຫານ.

**ພະວິນຍານສັກສິດແຫ່ງຄຳສັນຍາ.** ພະວິນຍານບໍລິສຸດໄດ້ຖືກເອີ້ນວ່າ ພະວິນຍານສັກສິດແຫ່ງຄຳສັນຍາຄືກັນ (see D&C 88:3). ການຜະນຶກໂດຍພະວິນຍານສັກສິດແຫ່ງຄຳສັນຍາໝາຍຄວາມວ່າ ພະວິນຍານບໍລິສຸດໄດ້ຢືນຢັນການກະທຳທີ່ຊອບທຳ, ພິທີການ, ແລະ ພັນທະສັນຍາຕ່າງໆທີ່ຍອມຮັບໂດຍພະເຈົ້າ. ພະວິນຍານສັກສິດແຫ່ງຄຳສັນຍາເປັນພະຍານຕໍ່ພະບິດາວ່າ ພິທີການແຫ່ງຄວາມລອດໄດ້ປະກອບຢ່າງຖືກຕ້ອງ ແລະ ວ່າພັນທະສັນຍາທີ່ພົວພັນກັບພິທີການເຫລົ່ານັ້ນໄດ້ຖືກຮັກສາໄວ້. ຜູ້ທີ່ໄດ້ຮັບການຜະນຶກໂດຍພະວິນຍານສັກສິດແຫ່ງຄຳສັນຍາ ຈະໄດ້ຮັບທຸກສິ່ງທີ່ພະບິດາມີ (see D&C 76:51–60; ເບິ່ງ ເອເຟໂຊ 1:13–14). ພັນທະສັນຍາ ແລະ ການປະກອບທັງໝົດ ຕ້ອງຖືກຜະນຶກໂດຍພະວິນຍານສັກສິດແຫ່ງຄຳສັນຍາ ກ່ອນມັນຈະເກີດຜົນຫລັງຈາກຊີວິດນີ້ (see D&C 132:7, 18–19, 26). ການທຳລາຍພັນທະສັນຍາຈະລຶບລ້າງການຜະນຶກນັ້ນ.

**ຂອງປະທານແຫ່ງພະວິນຍານ.** ຂອງປະທານແຫ່ງພະວິນຍານແມ່ນພອນພິເສດທາງວິນຍານເຊິ່ງ ພະຜູ້ເປັນເຈົ້າໄດ້ມອບໃຫ້ແຕ່ລະຄົນຜູ້ມີຄ່າຄວນ ເພື່ອເປັນປະໂຫຍດແກ່ຕົວຂອງເຂົາເຈົ້າເອງ ແລະ ເພື່ອໃຊ້ໃນການໃຫ້ພອນແກ່ຄົນອື່ນໆ. ຕົວຢ່າງເຊັ່ນ, ຜູ້ສອນສາດສະໜາທີ່ຕ້ອງຮຽນພາສາໃໝ່ອາດຈະໄດ້ຮັບຂອງປະທານແຫ່ງການເວົ້າພາສາ ເພື່ອຈະໃຫ້ການຊ່ອຍເຫລືອອັນສັກສິດໃນການຮຽນພາສາ. ຂອງປະທານແຫ່ງພະວິນຍານຫລາຍໆຢ່າງໄດ້ຖືກອະທິບາຍໄວ້ໃນ ໂມໂລໄນ 10:8–18; Doctrine and Covenants 46:11–33; ແລະ 1 ໂກລິນໂທ 12:1–12. ສິ່ງເຫລົ່ານີ້ເປັນພຽງຕົວຢ່າງສ່ວນນ້ອຍໜຶ່ງກ່ຽວກັບຂອງປະທານແຫ່ງພະວິນຍານ. ພະຜູ້ເປັນເຈົ້າອາດຈະໃຫ້ພອນແກ່ທ່ານດ້ວຍວິທີອື່ນຕາມຄວາມສັດຊື່ຂອງທ່ານ, ຕາມຄວາມ

ໝາຍເຫດ

ໝາຍເຫດ

ຕ້ອງການຂອງທ່ານ, ແລະ ຕາມຄວາມຕ້ອງການຂອງຄົນທີ່ທ່ານຮັບໃຊ້. ທ່ານຄວນປາດຖະໜາຢາກມີຂອງປະທານແຫ່ງພະວິນຍານ ແລະ ສະແຫວງຫາສິ່ງເຫລົ່ານີ້ຢ່າງພາກພຽນ. (see D&C 46:8; ເບິ່ງ 1 ໂກລິນໂທ 12:31; 14:1, 12). ຂອງປະທານເຫລົ່ານີ້ມາເຖິງດ້ວຍການອະທິຖານ, ສັດທາ, ແລະ ການກະທຳ, ຕາມຄວາມປາດຖະໜາຂອງພະເຈົ້າ (see D&C 63:9–12; 84:64–73).

**ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ**

ຈົ່ງອ່ານຂໍ້ອ້າງອີງຂ້າງລຸ່ມນີ້:

- The Guide to the Scriptures, "Holy Ghost," "Light, Light of Christ," and "Spirit."
- *Our Search for Happiness*, 84–86, 91–92.
- *True to the Faith*, 81–84, 165–67.

ຂຽນຄຳບັນຍາຍກ່ຽວກັບລັກສະນະ ແລະ ບົດບາດຂອງພະວິນຍານບໍລິສຸດ.

---

ອ່ານກິດຈະການ 4:23–33.

- ເປໂຕ ແລະ ໂຢຮັນ ສະແຫວງຫາຂອງປະທານແຫ່ງພະວິນຍານດ້ວຍວິທີໃດ?
- ພະຜູ້ເປັນເຈົ້າຕອບການອະທິຖານຂອງເຂົາເຈົ້າດ້ວຍວິທີໃດ?
- ທ່ານສາມາດຮຽນຮູ້ຫຍັງແດ່ຈາກປະສົບການນີ້ກ່ຽວກັບວຽກງານຂອງທ່ານເອງ?

## ອຳນາດຂອງພະວິນຍານໃນການປ່ຽນແປງ

ອຳນາດຂອງພະວິນຍານບໍລິສຸດແມ່ນຈຸດສຳຄັນຂອງການປ່ຽນແປງຂອງຄົນ. ພະຍາຍາມເຂົ້າໃຈຄຳສອນຂອງການປ່ຽນແປງ ແລະ ພ້ອມດ້ວຍປະສົບການຂອງການປ່ຽນແປງ. ປະທານ ບອຍ ເຄ ແພັກເກີ ໄດ້ອະທິບາຍບົດບາດຂອງພະວິນຍານທີ່ເປັນຈຸດສຳຄັນຂອງການປ່ຽນແປງວ່າ:

"ເມື່ອການປ່ຽນແປງໄດ້ເກີດຂຶ້ນ, ມັນເກີດຂຶ້ນຜ່ານອຳນາດຂອງພະວິນຍານ. ເພື່ອຈະໃຫ້ປະສົບຜົນສຳເລັດໃນວຽກງານເຜີຍແຜ່ໄດ້ນັ້ນ, ຕ້ອງມີສາມຢ່າງນີ້:

"ພວກເຮົາຕ້ອງເຂົ້າໃຈສິ່ງທີ່ຜູ້ສົນໃຈຕ້ອງຮູ້ສຶກ ເພື່ອຈະໄດ້ຮັບການປ່ຽນແປງ.

"ພວກເຮົາຕ້ອງເຂົ້າໃຈຜູ້ສອນສາດສະໜາຕ້ອງຮູ້ສຶກແນວໃດ ເພື່ອຈະສອນດ້ວຍອຳນາດຂອງພະວິນຍານ ທີ່ຈະປ່ຽນແປງຄົນ.

"ຫລັງຈາກນັ້ນ ພວກເຮົາຕ້ອງເຂົ້າໃຈວ່າ ສະມາຊິກຕ້ອງຮູ້ສຶກແນວໃດ ເພື່ອຈະມີຜົນສຳເລັດໃນການພົວພັນໃນປະສົບການກ່ຽວກັບການປ່ຽນແປງ" (mission presidents' conference, 3 Apr. 1985).



ເມື່ອທ່ານເຂົ້າໃຈດີຂຶ້ນກ່ຽວກັບຄວາມຮູ້ສຶກຂອງຜູ້ສົນໃຈ, ຜູ້ສອນສາດສະໜາ, ແລະ ສະມາຊິກ ເວລາເຂົາເຈົ້າໄດ້ຮັບປະຈັກພະຍານແຫ່ງພະວິນຍານ, ແລ້ວທ່ານຈະເຂົ້າໃຈບົດບາດຂອງທ່ານເອງດີຂຶ້ນ, ເຊິ່ງແມ່ນເພື່ອ:

- ຖືກຍົກລະດັບທາງວິນຍານ ແລະ ໃຫ້ສະໝອງຂອງທ່ານເຂົ້າໃຈເມື່ອທ່ານຄົ້ນຄວ້າພະຄຳພີ ແລະ ສອນຄຳສອນ.
- ສ້າງບັນຍາກາດໃນເວລາທ່ານສອນ ເພື່ອໃຫ້ພະວິນຍານບໍລິສຸດສາມາດສະແດງປະຈັກພະຍານ. ທ່ານເຮັດແບບນີ້ໂດຍການສອນ ແລະ ສະແດງປະຈັກພະຍານເຖິງຂ່າວສານຂອງການຟື້ນຟູ. ສອນດ້ວຍການຊີ້ນຳໂດຍພະວິນຍານ, ແລະ ສະແດງປະຈັກພະຍານວ່າ ທ່ານຮູ້ໂດຍອຳນາດຂອງພະວິນຍານບໍລິສຸດວ່າ ສິ່ງທີ່ທ່ານສອນເປັນຄວາມຈິງ.

ໝາຍເຫດ

- ເຮັດຕາມການນຳພາຂອງພະວິນຍານໃນການດັດແປງຂ່າວສານຕາມຄວາມຕ້ອງການຂອງແຕ່ລະຄົນ.
- ເຊື້ອເຊີນໃຫ້ຜູ້ສົນໃຈເຮັດ. ສັດທາຂອງເຂົາເຈົ້າຈະເຕີບ ໂຕເມື່ອເຂົາເຈົ້າກັບ ໃຈ, ເຊື່ອຟັງພະບັນຍັດ, ແລະ ເຮັດ ແລະ ຮັກສາພັນທະສັນຍາ.

ແອວເດີ ເອັມ ລັດໂສ ບາເລີດ ກ່າວເຖິງອຳນາດຂອງພະວິນຍານວ່າ: "ການປ່ຽນແປງທີ່ແທ້ຈິງມາເຖິງຜ່ານທາງອຳນາດຂອງພະວິນຍານ. ເມື່ອພະວິນຍານສຳພັດຫົວໃຈ, ຫົວໃຈຈະປ່ຽນແປງ. ເມື່ອບຸກຄົນ . . . ຮູ້ສຶກ ພະວິນຍານຊ່ອຍເຫລືອເຂົາ, ຫລື ເມື່ອເຂົາເຫັນຫລັກຖານຂອງຄວາມຮັກ ແລະ ຄວາມເມດຕາຂອງພະຜູ້ເປັນເຈົ້າໃນຊີວິດຂອງເຂົາ, ເຂົາໄດ້ຖືກຍົກລະດັບຂຶ້ນ ແລະ ເຂັ້ມແຂງທາງວິນຍານ ແລະ ສັດທາຂອງເຂົາໃນພະອົງຈະເພີ່ມຂຶ້ນ. ປະສົບການເຫລົ່ານີ້ນຳພະວິນຍານຕາມທຳມະດາແລ້ວ ຈະເກີດຂຶ້ນ ເມື່ອຄົນ ຄົນໜຶ່ງເຕັມໃຈທີ່ຈະທົດລອງພະຄຳຂອງພະເຈົ້າ. ນີ້ຄືວິທີທີ່ເຮົາຈະມີຄວາມ *ຮູ້ສຶກ* ວ່າພະກິດຕິຄຸນເປັນຄວາມຈິງ. ("Now Is the Time," *Ensign*, Nov. 2000, 75).

ພະວິນຍານບໍລິສຸດທຳງານໃນຫົວໃຈຂອງຜູ້ຄົນ ເພື່ອຈະເຮັດໃຫ້ການປ່ຽນແປງເຫລົ່ານີ້ເກີດຂຶ້ນ. ເມື່ອຜູ້ຄົນເລືອກທີ່ຈະຮັກສາຄຳໝັ້ນສັນຍາ, ເຂົາເຈົ້າຈະຮູ້ສຶກອຳນາດຂອງພະວິນຍານບໍລິສຸດຫລາຍຂຶ້ນ ແລະ ຈະ ພັດທະນາສັດທາເພື່ອຈະເຊື່ອຟັງພະຄິດ. ດັ່ງນັ້ນ, ທ່ານຄວນຊ່ອຍເຫລືອຜູ້ຄົນທີ່ທ່ານສອນໃຫ້ເຕີບ ໂຕໃນສັດທາ ໂດຍເຊື້ອເຊີນໃຫ້ເຂົາເຈົ້າກັບ ໃຈ ແລະ ເຮັດ ແລະ ຮັກສາພັນທະສັນຍາ.

## ກິດຈະກຳ: ການສຶກສາສ່ວນຕົວ

- ຈົ່ງອ່ານຂໍ້ພະຄຳພີຂໍ້ໜຶ່ງ ຫລື ສອງຂໍ້ດັ່ງຕໍ່ໄປນີ້, ແລະ ໄຕ່ຕອງວ່າຜູ້ສົນໃຈຈະຕ້ອງຮູ້ສຶກແນວໃດເພື່ອຈະປ່ຽນແປງ. ບັນທຶກຄວາມຮູ້ສຶກ ແລະ ຄວາມປະທັບໃຈໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ. ສົນທະນາຄວາມຄິດຂອງທ່ານນຳຜູ້ສອນສາດສະໜາຄົນອື່ນໆ ແລະ ສະມາຊິກທັງຫລາຍ.

  2 ນີໄຟ 4:16–35; ອີນັດ 1; ໂມໄຊຍາ 4–5; 18:7–14; Mosiah 27–28; ແອລະມາ 5; Alma 17–22; ແອລະມາ 32; Alma 36; Alma 38

- ຈົ່ງອ່ານພະຄຳພີຂໍ້ໜຶ່ງ ຫລື ສອງຂໍ້ດັ່ງຕໍ່ໄປນີ້, ແລະ ໄຕ່ຕອງວ່າທ່ານໃນຖານະເປັນຜູ້ສອນສາດສະໜາ ແລະ ໃນຖານະເປັນສະມາຊິກຈະຕ້ອງຮູ້ສຶກແນວໃດເພື່ອຈະສອນດ້ວຍອຳນາດທີ່ຈະປ່ຽນແປງຄົນ. ບັນທຶກຄວາມຮູ້ສຶກ ແລະ ຄວາມປະທັບໃຈໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ. ສົນທະນາຄວາມຄິດຂອງທ່ານນຳຜູ້ສອນສາດສະໜາຄົນອື່ນໆ ແລະ ສະມາຊິກທັງຫລາຍ.

  1 Nephi 8:11–12; Mosiah 28:1–4; Alma 26; 29; 31:26–38; ແອລະມາ 32; ໂມໂລໄນ 7:43–48; D&C 4; 18:10–16; 50:21–22

## ການສຶກສາພະຄຳພີ

### ຂໍ້ພະຄຳພີເຫລົ່ານີ້ໄດ້ສອນຫຍັງກ່ຽວກັບອຳນາດຂອງພະວິນຍານໃນວຽກງານຂອງທ່ານ?

| | | |
|---|---|---|
| 2 ນີໄຟ 33:1–2 | D&C 50:13–22 | 1 ໂກລິນໂທ 2:11–14 |
| D&C 42:11–17 | ກິດຈະການ 2:37–38 | Guide to the Scriptures, "Conversion, Convert" |

### ທ່ານສາມາດເຮັດຫຍັງແດ່ເພື່ອຈະມີອຳນາດຂອງພະວິນຍານໃນວຽກງານຂອງທ່ານ?

| | | |
|---|---|---|
| ແອລະມາ 32:27–28 | D&C 42:14 | ໂຢຮັນ 7:17 |

### ເປັນຫຍັງມັນຈຶ່ງສຳຄັນທີ່ຈະສອນສິ່ງທີ່ທ່ານຮູ້ ແລະ ເຊື່ອ?

| | | |
|---|---|---|
| ແອລະມາ 5:43–47 | D&C 52:9 | D&C 80:4 |

ໝາຍເຫດ

## ອະທິຖານດ້ວຍສັດທາ

ທ່ານສາມາດສອນຕາມວິທີຂອງພະຜູ້ເປັນເຈົ້າພຽງໂດຍອຳນາດຂອງພະວິນຍານເທົ່ານັ້ນ, ແລະ ທ່ານຈະໄດ້ຮັບພະວິນຍານຜ່ານການອະທິຖານດ້ວຍສັດທາ. ພະຜູ້ເປັນເຈົ້າໄດ້ກ່າວວ່າ ພະວິນຍານຈະຖືກມອບໃຫ້ທ່ານ ໂດຍການອະທິຖານແຫ່ງສັດທາ; ແລະ ຖ້າທ່ານບໍ່ໄດ້ຮັບພະວິນຍານ ທ່ານຈະບໍ່ສອນ (see D&C 42:14). ເມື່ອທ່ານອະທິຖານສຳລັບຄວາມຊ່ອຍເຫລືອໃນການສອນຂອງທ່ານ, ອຳນາດຂອງພະວິນຍານບໍລິສຸດຈະນຳສິ່ງທີ່ທ່ານສອນ "ໄປສູ່ຈິດໃຈຂອງລູກຫລານມະນຸດ" (2 ນີໄຟ 33:1).

ປະທານ ກໍດອນ ບີ ຮິງລີ ໄດ້ອະທິບາຍເຖິງຫລັກທຳນີ້ໂດຍການກ່າວເຖິງປະສົບການທີ່ເພິ່ນມີຕອນເປັນຜູ້ສອນສາດສະໜາ:

"ຂ້າພະເຈົ້າຈື່ຈຳສະເໝີຊາຍໜຸ່ມສອງຄົນທີ່ໄດ້ຮັບໃຊ້ຢູ່ໃນບ່ອນທີ່ຂ້າພະເຈົ້າໄປສອນສາດສະໜາ. ຜູ້ໜຶ່ງເປັນຄົນມີຊື່ສຽງ ແລະ ເກັ່ງຫລາຍ. ລາວມີການສຶກສາດີ. ລາວສະຫລາດ. ລາວວ່ອງໄວ. ລາວອວດດີໜ້ອຍໜຶ່ງ. ອີກຜູ້ໜຶ່ງເປັນຄົນທາສີປ້າຍ. ລາວໄດ້ເຮັດວຽກຢູ່ຮ້ານຂາຍປ້າຍ ແລະ ນ້ອຍການສຶກສາ, ແຕ່ວ່າລາວຮູ້ຈັກຄວາມຂາດຕົກບົກພ່ອງຂອງລາວເອງ ແລະ ໄດ້ເພິ່ງພາອາໄສພະຜູ້ເປັນເຈົ້າ. ເມື່ອລາວອະທິຖານ, ທຸກຄົນຮູ້ວ່າລາວເວົ້າລົມນຳພະຜູ້ເປັນເຈົ້າ. ມັນບໍ່ແມ່ນຄຳທີ່ລາວທ່ອງຈຳເພື່ອເອົາມາເວົ້າ, ແຕ່ເປັນການເວົ້າລົມ ແລະ ຊາຍໜຸ່ມຄົນນັ້ນໄດ້ຮັບຜົນສຳເລັດທີ່ໜ້າອັດສະຈັນໃຈ ໃນຂະນະດຽວກັນຊາຍໜຸ່ມອີກຄົນໜຶ່ງເຮັດສິ່ງທີ່ຕ້ອງເຮັດຢ່າງບໍ່ມີເປົ້າໝາຍ. ເຮົາເຫັນໄດ້ຢ່າງແຈ່ມແຈ້ງວ່າ ອຳນາດໄດ້ຢູ່ນຳຜູ້ໜຶ່ງ ແລະ ບໍ່ໄດ້ຢູ່ນຳອີກຜູ້ໜຶ່ງ. ຈົ່ງເອີ້ນຫາພະຜູ້ເປັນເຈົ້າ. ພະອົງໄດ້ເຊື້ອເຊີນໃຫ້ເຮັດ, ແລະ ພະອົງຈະຕອບທ່ານ. (*Teachings of Gordon B. Hinckley* [1997], 469).

ພະຍາຍາມອະທິຖານດ້ວຍຄວາມຈິງໃຈ, ດ້ວຍຄວາມຕັ້ງໃຈທີ່ແທ້ຈິງ, ແລະ ດ້ວຍ "ສຸດພະລັງຂອງຈິດໃຈ" (ໂມໂລໄນ 7:48). ການອະທິຖານທີ່ໄດ້ຜົນຕ້ອງມີຄວາມພະຍາຍາມຫລາຍທີ່ສຸດ (ເບິ່ງ ໂມໂລໄນ 10:3–4; see D&C 8:10; 9:7). ໃຫ້ຄິດຢ່າງໜັກແໜ້ນກ່ຽວກັບທ່າທີ ແລະ ຄຳເວົ້າທີ່ທ່ານຈະໃຊ້. ເມື່ອທ່ານອະທິຖານ, ຈົ່ງພິຈາລະນາສິ່ງດັ່ງຕໍ່ໄປນີ້:



- ໃຊ້ຖ້ອຍຄຳສຳລັບການອະທິຖານ, ເຊິ່ງສະແດງວ່າທ່ານຮັກ ແລະ ນັບຖືພະບິດາເທິງສະຫວັນຂອງທ່ານ. ໃຊ້ຖ້ອຍຄຳທີ່ເໝາະສົມ ແລະ ທີ່ໃຫ້ກຽດໃນພາສາໃດກໍຕາມທີ່ທ່ານເວົ້າ. ຕົວຢ່າງ, ໃຊ້ຄຳແທນນາມ ທີ່ພະຄຳພີໃຊ້ ດັ່ງເຊັ່ນ *ພະອົງ*.
- ໃຫ້ສະແດງຄວາມຮູ້ບຸນຄຸນສຳລັບພອນທັງຫລາຍຂອງທ່ານເປັນປະຈຳ. ຄວາມພະຍາຍາມທີ່ຈະຮູ້ບຸນຄຸນຈະຊ່ອຍໃຫ້ທ່ານຮູ້ຄວາມເມດຕາຂອງພະຜູ້ເປັນເຈົ້າທີ່ມີໃນຊີວິດຂອງທ່ານ.
- ໃຫ້ອະທິຖານເພື່ອການນຳພາ ແລະ ຄວາມຊ່ອຍເຫລືອທີ່ມາຈາກພະວິນຍານບໍລິສຸດ. ສະແດງອອກວ່າ ທ່ານຮູ້ຄວາມສຳຄັນຂອງພອນນີ້ໂດຍມີຄວາມຮູ້ສຶກໄວຕໍ່ ແລະ ຮູ້ການກະຕຸ້ນທາງວິນຍານ. ແລ້ວໃຫ້ເຮັດຕາມການກະຕຸ້ນນັ້ນຢ່າງກ້າຫານ.

ໝາຍເຫດ

- ໃຫ້ອະທິຖານດ້ວຍຄວາມຮັກ ແລະ ຄວາມໃຈບຸນ. ອະທິຖານເພື່ອຜູ້ຄົນດ້ວຍຊື່. ຮ້ອງຂໍເພື່ອຈະໄດ້ການດົນໃຈເພື່ອຈະຊ່ອຍເຫລືອທ່ານໃຫ້ເຂົ້າໃຈ ແລະ ຕອບສະໜອງຄວາມຕ້ອງການຂອງເຂົາເຈົ້າ. ອະທິຖານເພື່ອຄວາມສະຫວັດດີການຂອງຄົນທີ່ທ່ານໄດ້ຕິດຕໍ່, ຜູ້ສົນໃຈ, ຜູ້ປ່ຽນໃຈເຫລື້ອມໃສໃໝ່, ແລະ ສະມາຊິກທີ່ບໍ່ເຂັ້ມແຂງ. ອະທິຖານເພື່ອສະມາຊິກ ແລະ ຜູ້ນຳຖານະປະໂລຫິດ ແລະ ອົງການຊ່ອຍເຫລືອທັງຫລາຍຢູ່ໃນເຂດຂອງທ່ານ. ອະທິຖານເພື່ອຄອບຄົວຂອງທ່ານທີ່ຢູ່ບ້ານ. ອະທິຖານເພື່ອຄູ່ສອນສາດສະໜາຂອງທ່ານ, ຜູ້ສອນສາດສະໜາຄົນອື່ນໆ, ແລະ ປະທານເຜີຍແຜ່ຂອງທ່ານ. ອະທິຖານເພື່ອຈະຮູ້ວິທີທີ່ຈະຊ່ອຍເຫລືອຄົນອື່ນໆ ແລະ ຫລັງຈາກນັ້ນ ໃຫ້ເຕັມໃຈທີ່ຈະເສຍສະລະເພື່ອເຂົາເຈົ້າ.
- ອະທິຖານເພື່ອທ່ານຈະຖືກສະແດງໃຫ້ຮູ້ບ່ອນທີ່ຈະໄປຫາ ແລະ ສິ່ງທີ່ຈະເຮັດ. ອະທິຖານວ່າທ່ານຈະຖືກນຳໄປຫາຜູ້ຄົນຜູ້ຕຽມພ້ອມແລ້ວ ທີ່ຈະຮັບເອົາຂ່າວສານຂອງການຟື້ນຟູ. ອະທິຖານວ່າທ່ານຈະຮູ້ຈັກເຂົາເຈົ້າ.
- ຈົ່ງຮູ້ຈັກວ່າພະບິດາເທິງສະຫວັນຂອງທ່ານຮູ້ສິ່ງທີ່ທ່ານຕ້ອງການດີກວ່າທ່ານຮູ້. ໃຫ້ອາໄສພະວິນຍານເພື່ອຈະຮູ້ສິ່ງທີ່ຈະທູນຂໍໃນການອະທິຖານ (ເບິ່ງ 3 ນີໄຟ 19:24; see D&C 46:28, 30).

> *"ທຸກໆຕອນເຊົ້າ . . ., ຜູ້ສອນສາດສະໜາທັງຫລາຍຄວນຈະຄຸເຂົ່າ ແລະ ວິງວອນນຳພະຜູ້ເປັນເຈົ້າເພື່ອໃຫ້ລີ້ນຂອງເຂົາອ່ອນ ແລະ ເວົ້າຜ່ານເຂົາເພື່ອໃຫ້ພອນແກ່ຄົນທີ່ເຂົາຈະສອນ. ຖ້າເຂົາຈະເຮັດແບບນີ້, ແສງສະຫວ່າງອັນໃໝ່ຈະເຂົ້າມາສູ່ຊີວິດຂອງເຂົາ. ເຂົາຈະມີຄວາມກະຕືລືລົ້ນອັນຍິ່ງໃຫຍ່ຫລາຍຂຶ້ນໃນວຽກງານຂອງເຂົາ. ເຂົາຈະຮູ້ຢ່າງແທ້ຈິງວ່າເຂົາຄືຜູ້ຮັບໃຊ້ຂອງພະຜູ້ເປັນເຈົ້າ ຜູ້ກ່າວແທນພະອົງ. ເຂົາຈະໄດ້ຮັບການຕອບສະໜອງທີ່ແຕກຕ່າງຈາກຄົນທີ່ເຂົາສອນ. ເມື່ອເຂົາເຮັດແບບນີ້ດ້ວຍພະວິນຍານ, ຜູ້ສົນໃຈຈະຕອບສະໜອງພາຍໃຕ້ອິດທິພົນຂອງພະວິນຍານອັນດຽວກັນນັ້ນ."*
>
> – ປະທານ ກໍດອນ ບີ ຮິງລີ
>
> "MISSIONARY SERVICE," *FIRST WORLDWIDE LEADERSHIP TRAINING MEETING*, 11 JAN. 2003, 20.

- ໃນການອະທິຖານຂອງທ່ານຕອນກາງຄືນ, ໃຫ້ລາຍງານຕໍ່ພະຜູ້ເປັນເຈົ້າກ່ຽວກັບກິດຈະກຳຕ່າງໆຂອງທ່ານໃນມື້ນັ້ນ. ຫລັງຈາກນັ້ນ ໃຫ້ທົບທວນນຳພະອົງກ່ຽວກັບແຜນຂອງທ່ານສຳລັບມື້ຕໍ່ໄປ. ຈົ່ງຟັງເພື່ອຈະໄດ້ການກະຕຸ້ນທີ່ມາຈາກພະວິນຍານ.
- ອະທິຖານເພື່ອຈະເອົາຊະນະສິ່ງທີ່ລໍ້ລວງ. ການຍິນຍອມຕໍ່ສິ່ງທີ່ລໍ້ລວງ ຈະແຊກແຊງນຳພະວິນຍານ.
- ອະທິຖານ ແລະ ເມື່ອເໝາະສົມ, ໃຫ້ຖືສິນອົດເຂົ້າສຳລັບພອນພິເສດ.
- ອະທິຖານ ແລະ ໄຕ່ຕອງກ່ຽວກັບພະຄຳພີ. ພະຄຳພີຈະຊ່ອຍທ່ານໃຫ້ໄດ້ຮັບການເປີດເຜີຍ.
- ໃຫ້ເຊື່ອວ່າພະເຈົ້າຈະຕອບຄຳອະທິຖານຂອງທ່ານ. ຈົ່ງຮັບຮູ້ວ່າຄວາມຄິດຂອງພະເຈົ້າບໍ່ແມ່ນຄວາມຄິດຂອງທ່ານ (ເບິ່ງ ເອຊາຢາ 55:8–9), ແລະ ໄວ້ໃຈວ່າພະເຈົ້າຈະຕອບຄຳອະທິຖານຂອງທ່ານໃນວິທີຂອງພະອົງເອງ ແລະ ໃນເວລາຂອງພະອົງເອງ.

## ກິດຈະກຳ: ການສຶກສາສ່ວນຕົວ

ໃຫ້ໄຕ່ຕອງຂໍ້ຄວາມດັ່ງຕໍ່ໄປນີ້ກ່ຽວກັບການອະທິຖານທີ່ຈິງໃຈ:

"ບັນຫາໃນການອະທິຖານສ່ວນຫລາຍຂອງເຮົາແມ່ນວ່າ ເຮົາອະທິຖານຄືກັນກັບເຮົາຈັບໂທລະສັບຂຶ້ນມາ ແລະ ສັ່ງຊື້ສິ່ງຂອງ—ເຮົາສັ່ງແລ້ວກໍວາງໂທລະສັບທັນທີ. ເຮົາຄວນນັ່ງສະມາທິ, ພິຈາລະນາ, ຄິດວ່າເຮົາຈະອະທິຖານກ່ຽວກັບເລື່ອງໃດ ແລະ ທູນຂໍສິ່ງໃດ ແລ້ວຫລັງຈາກນັ້ນ ເຮົາຈຶ່ງເວົ້າລົມນຳພະຜູ້ເປັນເຈົ້າຄືກັນກັບຄົນເວົ້າລົມກັນ" (Gordon B. Hinckley, *Teachings of Gordon B. Hinckley*, 469).

ໝາຍເຫດ

ຖ້າການອະທິຖານເປັນພຽງການເອີ້ນຫາໃນເວລາທີ່ມີບັນຫາເທົ່ານັ້ນ, ແລ້ວມັນກໍເປັນການເຫັນແກ່ຕົວຫລາຍທີ່ສຸດ, ແລະ ເຮົາຖືພະເຈົ້າເປັນຄືກັນກັບຄົນສ້ອມແປງ ຫລື ອົງການຮັບໃຊ້ຊ່ອຍເຫລືອເຮົາໃນຍາມສຸກເສີນເທົ່ານັ້ນ. ເຮົາຄວນຈະຈື່ຈຳພະເຈົ້າອົງສູງສຸດທັງວັນ ແລະ ຄືນ—ຕະຫລອດໄປ—ບໍ່ແມ່ນພຽງແຕ່ໃນເວລາທີ່ການຊ່ອຍເຫລືອອື່ນໆບໍ່ໄດ້ຜົນ ແລະ ເຮົາຕ້ອງການຄວາມຊ່ອຍເຫລືອຢ່າງໝົດທາງອອກເທົ່ານັ້ນ. (Howard W. Hunter, *The Teachings of Howard W. Hunter*, ed. Clyde J. Williams [1997], 39).

---

ຈົ່ງໃຊ້ການຊັ່ງຊາດັ່ງຕໍ່ໄປນີ້, ປະເມີນການອະທິຖານຂອງທ່ານເປັນສ່ວນຕົວ. ໃນປື້ມບັນທຶກການສຶກສາຂອງທ່ານ, ໃຫ້ຂຽນຕອບຄຳຖາມແບບນີ້: ທ່ານຈະຊັ່ງຊາຕົວເອງໃຫ້ຢູ່ໃນຂັ້ນໃດ? ທ່ານຢາກຈະຢູ່ຂັ້ນໃດ ໃນການຊັ່ງຊານີ້. ທ່ານຈະປ່ຽນແປງແນວໃດ?

| ຕ່ຳ | ປານກາງ | ດີ |
|---|---|---|
| ມີສັດທາອ່ອນແອໃນພະຄິດ | ◀――▶ | ມີສັດທາເຂັ້ມແຂງໃນພະຄິດ |
| ບໍ່ຮູ້ຈັກບຸນຄຸນ | ◀――▶ | ຮູ້ຈັກບຸນຄຸນຢ່າງລົ້ນເຫລືອ |
| ໃຈບໍ່ຈົດຈໍ່ຢູ່ນຳວຽກງານ | ◀――▶ | ໃຈຈົດຈໍ່ຢູ່ນຳວຽກງານ |
| ຄຳອະທິຖານບໍ່ກ່ຽວພັນກັບການກະທຳ | ◀――▶ | ການກະທຳເຮັດໃຫ້ຄຳອະທິຖານເກີດຜົນສຳເລັດ |
| ເວົ້າຊ້ຳຄຳເກົ່າ | ◀――▶ | ຕັ້ງໃຈໃສ່ຕໍ່ຄວາມຕ້ອງການໃນວັນນີ້ |
| ຄວາມຮູ້ສຶກເບື່ອ | ◀――▶ | ຄວາມຮູ້ສຶກຍົກໃຫ້ສູງ ແລະ ສົດຊື່ນ |
| ຕັ້ງໃຈໃສ່ຕໍ່ຄວາມຄິດທີ່ບໍ່ບໍລິສຸດ | ◀――▶ | ຕັ້ງໃຈໃສ່ຕໍ່ຄວາມຄິດທີ່ບໍລິສຸດ |
| ເຫັນແກ່ຕົວ | ◀――▶ | ຄິດເຫັນຄົນອື່ນໆ |
| ອະທິຖານແບບທົ່ວໆໄປ, ບໍ່ເຈາະຈົງ | ◀――▶ | ອະທິຖານແບບເຈາະຈົງ, ບໍ່ແມ່ນທົ່ວໆໄປ |
| ພະວິນຍານບໍ່ຢູ່ນຳ | ◀――▶ | ພະວິນຍານນຳພາການອະທິຖານ |
| ບໍ່ຮູ້ຈັກຄຳຕອບ | ◀――▶ | ມີຄວາມໝັ້ນໃຈວ່າພະເຈົ້າຈະຕອບຄຳອະທິຖານ |

## ການສຶກສາພະຄຳພີ

**ເປັນຫຍັງທ່ານຕ້ອງອະທິຖານເພື່ອຂໍພະວິນຍານ?**

2 ນີໄຟ 32:8–9
D&C 42:14
D&C 50:13–22

**ທ່ານຄວນອະທິຖານເພື່ອຂໍຫຍັງແດ່?**

Alma 6:6
Alma 13:28
ແອລະມາ 34:17–27
Alma 37:36–37
3 ນີໄຟ 18:20
3 ນີໄຟ 19:9
D&C 50:29–30
Guide to the Scriptures, "Prayer"

## ຮຽນຮູ້ເພື່ອຈະຮູ້ຈັກການກະຕຸ້ນຂອງພະວິນຍານ

ພະວິນຍານຕຽມພ້ອມສະເໝີທີ່ຈະນຳພາ ແລະ ຊີ້ນຳທ່ານ. ແຕ່ວ່າ, ພະວິນຍານເວົ້າຢ່າງຄ່ອຍໆ, ຜ່ານຄວາມຮູ້ສຶກຂອງທ່ານ ແລະເຂົ້າທາງຈິດໃຈຂອງທ່ານ. ສິ່ງໜຶ່ງທີ່ເປັນສິ່ງທີ່ທ້າທາຍອັນຍິ່ງໃຫຍ່ສຳລັບທ່ານ ແລະ ຄົນທີ່ທ່ານສອນແມ່ນການຮູ້ຈັກການກະຕຸ້ນທີ່ເບົາ ແລະ ຄ່ອຍໆຂອງພະວິນຍານບໍລິສຸດ.

ປະທານ ບອຍ ເຄ ແພັກເກີ ໄດ້ສອນວ່າ: "ພະຄຳພີບັນລະຍາຍສຽງຂອງພະວິນຍານວ່າ ບໍ່ໄດ້ 'ດັງ' ຫລື 'ຣຸນແຮງ.' 'ບໍ່ແມ່ນສຽງຂອງຟ້າຮ້ອງ, ຫລື . . . ສຽງອຶກກະທຶກນຶກນອງອັນຍິ່ງໃຫຍ່.' ແຕ່ 'ແມ່ນສຽງຄ່ອຍໆ ຄືກັບວ່າຊິ່ມໃສ່ຫູ' ແລະ ມັນສາມາດ 'ສຽບແທງເຂົ້າຮອດຈິດວິນຍານທຸກສ່ວນ' ແລະ 'ເຮັດໃຫ້ [ຈິດໃຈ] ຮ້ອນໄໝ້.' (3 ນີໄຟ 11:3; Hel. 5:30; D&C 85:6–7.)

ຈື່ໄດ້ບໍວ່າ, ເອລີຢາ ເຫັນວ່າສຽງຂອງພະຜູ້ເປັນເຈົ້າບໍ່ຢູ່ໃນລົມ, ບໍ່ຢູ່ໃນແຜ່ນດິນໄຫວ, ບໍ່ຢູ່ໃນໄຟ, ແຕ່ເປັນ 'ສຽງຊື່ມເບົາໆ ດັ່ງແວ່ວ.' (1 ກະສັດ 19:12.)

"ພະວິນຍານບໍ່ໄດ້ກະຕຸ້ນເຮົາໃຫ້ສົນໃຈພະອົງໂດຍການຮ້ອງສຽງດັງ ຫລື ສັ່ນເຮົາຢ່າງແຮງ. ແຕ່ພະວິນຍານຈະຊື່ມໃສ່ຫູເຮົາ. ປອບປະໂລມເຮົາຢ່າງອ່ອນໂຍນທີ່ສຸດ ຈົນວ່າຖ້າເຮົາຫຍຸ້ງຢູ່ກັບຢ່າງອື່ນ ເຮົາອາດຈະບໍ່ຮູ້ສຶກພະວິນຍານເລີຍ. (ມັນບໍ່ແປກທີ່ວ່າ ພະວາຈາແຫ່ງປັນຍາໄດ້ຖືກເປີດເຜີຍຕໍ່ເຮົາ, ເພາະວ່າຄົນຂີ້ເຫລົ້າ ແລະ ຕິດຢາຈະຮູ້ສຶກສຽງແບບນັ້ນໄດ້ແນວໃດ?)

"ບາງຄັ້ງ ພະວິນຍານຈະຊຸ່ມໜ້ອຍໜຶ່ງພໍທີ່ຈະເຮັດໃຫ້ເຮົາເອົາໃຈໃສ່. ແຕ່ສ່ວນຫລາຍແລ້ວ, ຖ້າເຮົາບໍ່ເອົາໃຈໃສ່ຕໍ່ຄວາມຮູ້ສຶກອ່ອນໂຍນນັ້ນ, ພະວິນຍານຈະອອກໄປ ແລະ ຄອຍຖ້າຈົນວ່າເຮົາສະແຫວງຫາ ແລະ ຮັບຟັງ ແລະ ເວົ້າໃນຄວາມຮູ້ສຶກ ແລະ ການສະແດງອອກຂອງເຮົາ, ຄືກັນກັບ ຊາມູເອນ ໃນສະໄໝໂບຮານວ່າ, 'ຜູ້ຮັບໃຊ້ຂອງພະອົງກຳລັງຟັງຢູ່ ຂໍພະອົງສັ່ງມາເຖີດ.' (1 ຊາມູເອນ 3:10.)" ("The Candle of the Lord," *Ensign*, Jan. 1983, 53).

ມີຫລາຍສຽງຢູ່ໃນໂລກນີ້ແຂ່ງກັນເພື່ອຕ້ອງການຄວາມສົນໃຈຂອງທ່ານ, ແລະ ສຽງເຫລົ່ານີ້ສາມາດດຶງເອົາຄວາມຮູ້ສຶກທາງວິນຍານອອກຢ່າງງ່າຍຖ້າທ່ານບໍ່ລະມັດລະວັງ.

## ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ

ສຶກສາຕາຕະລາງດັ່ງຕໍ່ໄປນີ້. ໃຫ້ຄິດເຖິງເວລາທີ່ທ່ານໄດ້ມີປະສົບການກ່ຽວກັບຄວາມຮູ້ສຶກ, ຄວາມຄິດ, ຫລື ຄວາມປະທັບໃຈທີ່ຖືກບັນຍາຍໄວ້ໃນຂໍ້ພະຄຳພີຂ້າງລຸ່ມນີ້. ເມື່ອທ່ານສຶກສາ ແລະ ມີປະສົບການເພີ່ມຂຶ້ນ, ໃຫ້ຕື່ມຂໍ້ພະຄຳພີໃສ່ຕາຕະລາງນີ້. ຄິດຫາວິທີທີ່ທ່ານຈະສາມາດໃຊ້ຫລັກທຳເຫລົ່ານີ້ ເພື່ອຊ່ອຍຄົນອື່ນໆໃຫ້ຮູ້ສຶກ ແລະ ຮູ້ຈັກພະວິນຍານ.

| | |
|---|---|
| D&C 6:23; 11:12–14; ໂລມ 15:13; ຄາລາເຕຍ 5:22–23 | ໃຫ້ຄວາມຮູ້ສຶກຂອງຄວາມຮັກ, ຄວາມປິຕິຍິນດີ, ຄວາມສະຫງົບ, ຄວາມອົດທົນ, ຄວາມອ່ອນໂຍນ, ຄວາມສຸພາບ, ສັດທາ, ແລະ ຄວາມຫວັງ. |
| D&C 8:2–3 | ໃຫ້ແນວຄິດແກ່ສະໝອງ ແລະ ຄວາມຮູ້ສຶກໃນໃຈ. |
| D&C 128:1 | ຄວບງຳແນວຄິດ ແລະ ມີອິດທິພົນໃນຄວາມຮູ້ສຶກ. |
| Joseph Smith—History 1:11–12 | ຊ່ອຍໃຫ້ພະຄຳພີມີຜົນສະທ້ອນທີ່ເຂັ້ມແຂງ. |
| D&C 9:8–9 | ໃຫ້ມີຄວາມຮູ້ສຶກທີ່ດີເພື່ອຈະສອນຖ້າສິ່ງໃດສິ່ງໜຶ່ງເປັນຄວາມຈິງ. |
| ແອລະມາ 32:28; D&C 6:14–15; 1 ໂກລິນໂທ 2:9–11 | ໃຫ້ຄວາມຮູ້ແກ່ສະໝອງ. |
| Alma 19:6 | ສັບປ່ຽນຄວາມມືດດ້ວຍແສງສະຫວ່າງ. |
| ໂມໄຊຢາ 5:2–5 | ເຮັດໃຫ້ມີຄວາມປາດຖະໜາຫລາຍຂຶ້ນ ທີ່ຈະຫລີກລ້ຽງຄວາມຊົ່ວ ແລະ ເຊື່ອຟັງພະບັນຍັດ. |
| ໂຢຮັນ 14:26 | ສອນຄວາມຈິງ ແລະ ເຮັດໃຫ້ຄົນຈື່ຈຳຄວາມຈິງນັ້ນ. |
| ໂຢຮັນ 14:27 | ໃຫ້ຄວາມຮູ້ສຶກກ່ຽວກັບຄວາມສະຫງົບ ແລະ ການປອບໂຍນ. |
| ໂຢຮັນ 16:13 | ນຳພາໄປສູ່ຄວາມຈິງ ແລະ ສະແດງໃຫ້ເຫັນສິ່ງທີ່ຈະເກີດຂຶ້ນ. |
| ໂມໂລໄນ 10:5 | ເປີດເຜີຍຄວາມຈິງ. |
| D&C 45:57 | ນຳພາ ແລະ ປ້ອງກັນຈາກສິ່ງທີ່ລໍ້ລວງ. |
| 2 ນີໄຟ 31:18; D&C 20:27; ໂຢຮັນ 16:14 | ໃຫ້ລັດສະໝີພາບແກ່ພະເຈົ້າອົງເປັນພະບິດາ ແລະ ພະເຢຊູຄຣິດ ແລະ ບັນທຶກປະຈັກພະຍານກ່ຽວກັບທັງສອງພະອົງ. |

ໝາຍເຫດ

ໝາຍເຫດ

| | |
|---|---|
| D&C 42:16; 84:85; 100:5–8; ລູກາ 12:11–12 | ນຳພາຄູທີ່ຖ່ອມຕົວໃນການປາກເວົ້າ. |
| ໂຢຮັນ 16:8 | ຮູ້ຈັກ ແລະ ແກ້ໄຂບາບ. |
| ໂມໂລໄນ 10:8–17; D&C 46:8–26; 1 ໂກລິນໂທ 12 | ມອບຂອງປະທານແຫ່ງພະວິນຍານ. |
| Alma 10:17; ແອລະມາ 12:3; Alma 18:16, 20, ແອລະມາ 32, Alma 35; D&C 63:41 | ຊ່ອຍໃຫ້ເຫັນ ຫລື ເຂົ້າໃຈຄວາມຄິດຂອງຄົນອື່ນໆ. |
| D&C 46:30; 50:29–30 | ບອກໃຫ້ຮູ້ສິ່ງທີ່ຈະທູນຂໍໃນການອະທິຖານ. |
| 2 ນີໄຟ 32:1–5; D&C 28:15 | ບອກເຖິງສິ່ງທີ່ຕ້ອງເຮັດ. |
| 1 Nephi 10:22; Alma 18:35 | ຊ່ອຍເຫລືອໃຫ້ຜູ້ຊອບທຳເວົ້າດ້ວຍພະລັງ ແລະ ອຳນາດ. |
| D&C 21:9; 100:8; ໂຢຮັນ 15:26 | ສະແດງປະຈັກພະຍານກ່ຽວກັບຄວາມຈິງ. |
| 2 ນີໄຟ 31:17; Alma 13:12; 3 ນີໄຟ 27:20 | ຊຳລະ ແລະ ນຳການປົດບາບມາໃຫ້. |
| 1 ນີໄຟ 2:16–17; 2 ນີໄຟ 33:1; Alma 24:8 | ນຳພາຄວາມຈິງເຂົ້າສູ່ຈິດໃຈຂອງຜູ້ຟັງ. |
| 1 ນີໄຟ 1:1–3; ອົບພະຍົບ 31:3–5 | ເພີ່ມຄວາມຊຳນານ ແລະ ຄວາມສາມາດ. |
| 1 ນີໄຟ 7:15; 2 Nephi 28:1; 2 ນີໄຟ 32:7; Alma 14:11; ມໍມອນ 3:16; Ether 12:2 | ບັງຄັບ (ກະຕຸ້ນຕໍ່ໄປ) ຫລື ຍັບຍັ້ງ (ຄວບຄຸມ). |
| D&C 50:13–22 | ສິດສອນທັງຄູ ແລະ ນັກຮຽນ. |
| D&C 88:3; ໂຢຮັນ 14:26 | ໃຫ້ການປອບໂຍນ. |
| | |
| | |
| | |
| | |

ໃນການຕອບຕໍ່ຄຳຖາມ, "ເຮົາຈະຮູ້ຈັກການກະຕຸ້ນຂອງພະວິນຍານໄດ້ແນວໃດ?" ປະທານ ກໍດອນ ບີ ຮິງລີ ໄດ້ອ່ານ ໂມໂລໄນ 7:13, 16–17 ແລະ ກໍໄດ້ກ່າວວ່າ: "ເມື່ອເວົ້າແລ້ວ, ນັ້ນແມ່ນການທົດສອບ. ມັນໄດ້ຊັກຊວນໃຫ້ຄົນ ຄົນໜຶ່ງເຮັດຄວາມດີ, ກ້າວໜ້າ, ກ້າຫານ, ເຮັດສິ່ງທີ່ຖືກຕ້ອງ, ມີຄວາມເມດຕາ, ເປັນຄົນເພື່ອແຜ່ບໍ? ຖ້າເປັນແນວນັ້ນ ມັນຄືພະວິນຍານຂອງພະເຈົ້າ. . . .

"ຖ້າສິ່ງໃດສິ່ງໜຶ່ງເຊື້ອເຊີນໃຫ້ເຮັດຄວາມດີ, ມັນມາຈາກພະເຈົ້າ. ຖ້າສິ່ງໃດສິ່ງໜຶ່ງເຊື້ອເຊີນໃຫ້ເຮັດຄວາມຊົ່ວ, ມັນມາຈາກມານ. . . . ແລະ ຖ້າທ່ານເຮັດສິ່ງທີ່ຖືກຕ້ອງ ແລະ ຖ້າທ່ານດຳລົງຊີວິດຢ່າງຖືກຕ້ອງ, ທ່ານຈະຮູ້ໃນຈິດໃຈຂອງທ່ານສິ່ງທີ່ພະວິນຍານໄດ້ເວົ້າຕໍ່ທ່ານ.

"ທ່ານຮູ້ຈັກການກະຕຸ້ນຂອງພະວິນຍານໂດຍຜົນງານຂອງພະວິນຍານ—ເຊິ່ງໃຫ້ແສງສະຫວ່າງ, ເຊິ່ງໃຫ້ການເສີມສ້າງ, ເຊິ່ງໃຫ້ຄວາມໝັ້ນໃຈ ແລະ ການຢືນຢັນ ແລະ ເຊີດຊູ ແລະ ນຳພາເຮົາສູ່ຄວາມຄິດທີ່ດີ ແລະ ຄຳເວົ້າທີ່ດີຂຶ້ນ ແລະ ການກະທຳທີ່ດີຂຶ້ນ ເຊິ່ງແມ່ນເປັນຍ້ອນພະວິນຍານຂອງພະເຈົ້າ" (*Teachings of Gordon B. Hinckley*, 260–61).

ພະເຈົ້າຕອບຄຳອະທິຖານຂອງທ່ານຜ່ານການດົນໃຈ ແລະ ການເປີດເຜີຍສ່ວນຕົວ. ຜ່ານພະວິນຍານບໍລິສຸດ ພະອົງຈະນຳພາທ່ານໃນການພະຍາຍາມຊອກຫາຜູ້ຄົນເພື່ອຈະສອນ, ເມື່ອທ່ານສອນພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່, ແລະ ເມື່ອທ່ານເພີ່ມຄວາມເຂັ້ມແຂງໃຫ້ແກ່ສະມາຊິກທີ່ບໍ່ເຂັ້ມແຂງ ແລະ ຜູ້ປ່ຽນໃຈເຫລື້ອມໃສໃໝ່. ໜ້າທີ່ຂອງທ່ານຄືດຳລົງຊີວິດໃຫ້ມີຄ່າຄວນ, ອະທິຖານດ້ວຍຄວາມຈິງໃຈ, ແລະ ຮຽນຮູ້ເພື່ອຈະຮູ້ຈັກ ແລະ ເຮັດຕາມການນຳພາຂອງພະວິນຍານຢ່າງກ້າຫານ.

## ການອາໄສພະວິນຍານ

ໃນຖານະທີ່ເປັນຄົນຮັບໃຊ້ຂອງພະຜູ້ເປັນເຈົ້າ, ທ່ານຈະເຮັດວຽກງານຂອງພະອົງໃນວິທີຂອງພະອົງ ແລະ ດ້ວຍອຳນາດຂອງພະອົງ. ຜູ້ສອນສາດສະໜາບາງຄົນຮູ້ສຶກມີຄວາມໝັ້ນໃຈວ່າເຂົາເຈົ້າຮູ້ວິທີທີ່ຈະປະສົບຜົນສຳເລັດ. ແຕ່ບາງອື່ນຂາດ

ໝາຍເຫດ

ຄວາມໝັ້ນໃຈ. ແຕ່ຈົ່ງຈື່ຈຳວ່າຄວາມໝັ້ນໃຈ ແລະ ສັດທາຂອງທ່ານຄວນຈະມີໃນພະຄຣິດ, ບໍ່ແມ່ນໃນຕົວຂອງທ່ານເອງ. ຈົ່ງອາໄສພະວິນຍານຫລາຍກວ່າພອນສະຫວັນ ແລະ ຄວາມສາມາດຂອງທ່ານເອງ. ຈົ່ງໄວ້ວາງໃຈຕໍ່ພະວິນຍານທີ່ຈະນຳພາທ່ານໃນທຸກໆພາກສ່ວນຂອງວຽກງານຂອງທ່ານ. ສາດສະດາ ໂຢເຊັບ ສະມິດ ໄດ້ສອນວ່າ ພະວິນຍານເປັນພື້ນຖານໃນການສອນ ແລະ ການເທດສະໜາ:

"ບໍ່ມີມະນຸດຄົນໃດສາມາດສອນພະກິດຕິຄຸນປາດສະຈາກພະວິນຍານບໍລິສຸດ" (*History of the Church*, 2:477).

"ມີສ່ວນໜ້ອຍທີ່ໄດ້ຖືກເອີ້ນ ແລະ ແຕ່ງຕັ້ງໂດຍພະວິນຍານແຫ່ງການເປີດເຜີຍ ແລະ ການພະຍາກອນ, ແລະ ເລີ່ມສອນເມື່ອພະວິນຍານບອກຄຳເວົ້າໃຫ້ເຂົາເຖິງແມ່ນເຂົາຈະອ່ອນແອ, ແຕ່ເຂົາໄດ້ຮັບຄວາມເຂັ້ມແຂງໂດຍອຳນາດຂອງພະເຈົ້າ" (*History of the Church*, 4:538).

[ໂຢເຊັບ ສະມິດ] ໄດ້ໃຫ້ຄຳສັ່ງສອນແກ່ແອວເດີທັງຫລາຍຕໍ່ໄປອີກວ່າ ຕ້ອງໃຫ້ກຽດການສອນພະກິດຕິຄຸນ, ແລະ ສັ່ງເຂົາເຖິງຄວາມຈຳເປັນທີ່ຈະມີພະວິນຍານເພື່ອວ່າເຂົາຈະສອນດ້ວຍພະວິນຍານບໍລິສຸດທີ່ສົ່ງມາຈາກສະຫວັນ" (*History of the Church*, 4:13).

ລະຫວ່າງຕອນເຮັດແຜນປະຈຳອາທິດ ແລະ ປະຈຳວັນຂອງທ່ານ, ທ່ານຈະຕ້ອງຖາມຄຳຖາມງ່າຍໆທຸກມື້— ເຖິງແມ່ນວ່າຫລາຍເທື່ອແຕ່ລະມື້ (ເບິ່ງໜ້າສະຫລຸບຂອງການສຶກສາພະຄຳພີ ທີ່ຕິດຕາມຕົວຢ່າງຄຳຖາມ). ສະແຫວງຫາການດົນໃຈເພື່ອຕອບຄຳຖາມເຫລົ່ານີ້ໃນວິທີທີ່ຈະເໝາະສົມແຕ່ລະສະພາບການ. ຄຳຕອບຕ້ອງນຳມາໃຊ້ເມື່ອທ່ານເຮັດແຜນຕ່າງໆ. ແຕ່ທ່ານຄວນຈະເຕັມໃຈເຮັດຕາມພະວິນຍານ ແລະ ປ່ຽນແຜນຂອງທ່ານເມື່ອໂອກາດທີ່ບໍ່ໄດ້ຄາດໄວ້ລ່ວງໜ້າເກີດຂຶ້ນ.

ຈົ່ງສຶກສາຂໍ້ພະຄຳພີດັ່ງຕໍ່ໄປນີ້ ແລະ ພິຈາລະນາວ່າ ຂໍ້ເຫລົ່ານັ້ນໄດ້ຕອບຄຳຖາມທີ່ສຳຄັນເຫລົ່ານີ້ ທີ່ທ່ານຄວນຖາມແຕ່ລະມື້ແນວໃດ. ພິຈາລະນາຄວາມໝາຍຂອງຂໍ້ເຫລົ່ານີ້ສຳລັບການພະຍາຍາມຊອກຫາຄົນ, ຕອນວາງແຜນ, ແລະ ການສຶກສາສ່ວນຕົວ ແລະ ການສຶກສາກັບຄູ່ສອນສາດສະໜາຂອງທ່ານ. ໃຫ້ພິຈາລະນາຄວາມໝາຍຂອງຂໍ້ເຫລົ່ານີ້ນຳອີກເມື່ອທ່ານສອນບົດຮຽນເຫລົ່ານີ້, ເຊື້ອເຊີນຜູ້ຄົນໃຫ້ເຮັດຄຳໝັ້ນສັນຍາ, ຕິດຕາມເບິ່ງກ່ຽວກັບຄຳໝັ້ນສັນຍາ, ເພີ່ມຄວາມເຂັ້ມແຂງໃຫ້ສະມາຊິກໃໝ່ ແລະ ສະມາຊິກທີ່ບໍ່ເຂັ້ມແຂງ ແລະ ເຮັດວຽກງານນຳສະມາຊິກ.

## ການສຶກສາພະຄຳພີ

### ເຮົາຄວນຈະໄປໃສ?

Helaman 10:17
D&C 31:11
D&C 75:26–27
D&C 79:1–2

### ເຮົາຄວນຈະເຮັດຫຍັງ?

1 ນີໄຟ 4:6
2 ນີໄຟ 32:2–5
D&C 28:15
D&C 52:3–4

### ເຮົາຄວນຈະເວົ້າຫຍັງ?

2 ນີໄຟ 33:1
ແອລະມາ 5:43–46
ແອລະມາ 11:22
Helaman 5:18
ຣີລາມັນ 13:3–5
D&C 33:8–10
D&C 50:13–22
D&C 68:1–4
D&C 75:3–11
D&C 100:5–8
ມັດທາຍ 10:19–20
ມາລາໂກ 13:11
1 ໂກລິນໂທ 2:4–5, 12–13
ອົບພະຍົບ 4:10–12

### ເຮົາຈະດັດແປງການສອນຂອງເຮົາໃຫ້ເໝາະສົມກັບຜູ້ສົນໃຈຂອງເຮົາໄດ້ແນວໃດ?

ແອລະມາ 12:7
ແອລະມາ 41:1
3 ນີໄຟ 17:2–3
D&C 71:1
D&C 84:85

ໝາຍເຫດ

**ເຮົາຄວນຈະໃຊ້ພະຄຳພີຂໍ້ໃດ ແລະ ເຮົາຈະໃຊ້ຂໍ້ເຫລົ່ານັ້ນດ້ວຍວິທີໃດ?**

| | | |
|---|---|---|
| ໂມໄຊຍາ 18:19–20 | D&C 32:4 | D&C 71:1 |
| Mosiah 27:35 | D&C 42:11–17 | D&C 80:4 |
| D&C 18:32–36 | D&C 68:1–4 | ລູກາ 24:13–32 |

## ເຕືອນໃຫ້ລະມັດລະວັງ

ເມື່ອທ່ານອະທິຖານເພື່ອການດົນໃຈ, ທ່ານຄວນຢືນຢັນຄວາມຮູ້ສຶກຂອງທ່ານນຳອີກ. ຕົວຢ່າງເຊັ່ນ, ປຽບທຽບການຕັດສິນໃຈຂອງທ່ານໃສ່ຂໍ້ພະຄຳພີ ແລະ ການສອນຂອງສາດສະດາທີ່ມີຊີວິດຢູ່. ໃຫ້ແນ່ໃຈວ່າຄວາມຮູ້ສຶກເຫລົ່ານີ້ກົງກັນກັບພາລະທີ່ທ່ານມີ. ຕົວຢ່າງເຊັ່ນ, ທ່ານຈະບໍ່ໄດ້ຮັບການເປີດເຜີຍທີ່ຈະບອກອະທິການໃນທ້ອງຖິ່ນວິທີທີ່ເພິ່ນຄວນເຮັດໜ້າທີ່ຂອງເພິ່ນ. ໃຫ້ສົນທະນາການຕັດສິນໃຈ ແລະ ການສະຫລຸບຂອງທ່ານນຳຄູ່ສອນສາດສະໜາຂອງທ່ານ, ຜູ້ນຳທ້ອງຖິ່ນຂອງທ່ານ, ຫລື ປະທານເຜີຍແຜ່ຂອງທ່ານເມື່ອເຫັນວ່າເໝາະສົມ.

> “ຖ້າເຮົາມີຄ່າຄວນ, ເຮົາມີສິດທີ່ຈະໄດ້ຮັບການເປີດເຜີຍສຳລັບຕົວເອງ, ພໍ່ແມ່ຈະໄດ້ຮັບສຳລັບລູກໆຂອງເຂົາເຈົ້າ, ແລະ ສະມາຊິກຂອງສາດສະໜາຈັກຈະໄດ້ຮັບສຳລັບການເອີ້ນຂອງເຂົາ. ແຕ່ວ່າຈະບໍ່ໄດ້ຮັບສິດທີ່ຈະຮັບການເປີດເຜີຍສຳລັບຄົນອື່ນໆທີ່ເໜືອໄປກວ່າການຮັບຜິດຊອບຕໍ່ໜ້າທີ່ຂອງເຮົາເອງ.”
>
> – ປະທານ ເຈມ ອີ ຟາວ
>
> “COMMUNION WITH THE HOLY SPIRIT,” *ENSIGN*, MAR. 2002, 4.

ປະທານ ຮາວເວີດ ດັບເບີນຢູ ຮັນເທີ ໄດ້ໃຫ້ຄຳສັ່ງສອນນີ້ວ່າ: “ຂ້າພະເຈົ້າຂໍສະເໜີຄວາມລະມັດລະວັງ. . . . ຂ້າພະເຈົ້າຄິດວ່າ ຖ້າເຮົາບໍ່ລະມັດລະວັງ . . . , ເຮົາອາດຈະທຳທ່າວ່າ ມີອິດທິພົນທີ່ແທ້ຈິງຂອງພະວິນຍານຂອງພະຜູ້ເປັນເຈົ້າໂດຍແບບຢ່າງທີ່ບໍ່ມີຄ່າຄວນ ແລະ ມີເລ້ຫລ່ຽມ. ຂ້າພະເຈົ້າມີຄວາມເປັນຫ່ວງເມື່ອຄົນຖືວ່າຄວາມຮູ້ສຶກທີ່ເຂັ້ມແຂງ ຫລື ນ້ຳຕາທີ່ໄຫລ່ລົງແມ່ນເພາະການສະແດງຂອງພະວິນຍານ. ແນ່ນອນພະວິນຍານຂອງພະຜູ້ເປັນເຈົ້າສາມາດນຳຄວາມຮູ້ສຶກທີ່ເຂັ້ມແຂງ, ຮ່ວມດ້ວຍນ້ຳຕາ, ແຕ່ວ່າການສະແດງອອກບໍ່ຄວນສັບສົນ ກັບການສະແດງຂອງພະວິນຍານ” (*The Teachings of Howard W. Hunter*, 184). ພະວິນຍານຂອງພະເຈົ້າຈະໃຫ້ຄວາມຮູ້ສະເໝີ.

ການເປີດເຜີຍ ແລະ ປະສົບການທາງວິນຍານເປັນສິ່ງທີ່ສັກສິດ. ສິ່ງເຫລົ່ານີ້ຄວນຮັກສາໄວ້ໃຫ້ເປັນສ່ວນຕົວ ແລະ ຄວນສົນທະນາໃນສະພາບການທີ່ເໝາະສົມເທົ່ານັ້ນ. ໃນຖານະເປັນຜູ້ສອນສາດສະໜາ, ທ່ານອາດຈະຮູ້ສຶກເຖິງປະສົບການທາງວິນຍານຫລາຍກວ່າທີ່ຜ່ານມາໃນຊີວິດຂອງທ່ານ. ໃຫ້ຢັບຢັ້ງ ທີ່ຈະເວົ້າກ່ຽວກັບປະສົບການເຫລົ່ານີ້ແບບທົ່ວໆໄປ.

ປະທານ ບອຍ ເຄ ແພັກເກີ ໄດ້ສັ່ງສອນວ່າ: “ຂ້າພະເຈົ້າໄດ້ຮຽນຮູ້ວ່າ ປະສົບການທາງວິນຍານທີ່ເຂັ້ມແຂງ ແລະ ປະທັບໃຈນັ້ນ ບໍ່ໄດ້ເກີດຂຶ້ນກັບເຮົາເລື້ອຍປານໃດ. ແລະ ເມື່ອເກີດຂຶ້ນ, ສ່ວນຫລາຍແລ້ວເກີດຂຶ້ນເພື່ອໃຫ້ຄວາມຮູ້, ເພື່ອແນະນຳ, ຫລື ເພື່ອແກ້ໄຂໃຫ້ຖືກຕ້ອງ. ເວັ້ນແຕ່ວ່າເຮົາໄດ້ຖືກເອີ້ນໂດຍອຳນາດທີ່ເໝາະສົມໃຫ້ເຮັດ, ປະສົບການເຫລົ່ານັ້ນບໍ່ໄດ້ໃຫ້ອຳນາດເຮົາໃຫ້ສັ່ງສອນ ຫລື ແກ້ໄຂຄົນອື່ນໆ.

“ຂ້າພະເຈົ້າເຊື່ອອີກວ່າ ມັນບໍ່ສະຫລາດທີ່ຈະເວົ້າເຖິງປະສົບການທາງວິນຍານທີ່ແປກປະຫລາດ. ສິ່ງເຫລົ່ານີ້ ຄວນຈະຮັກສາໄວ້ຢ່າງລະມັດລະວັງ ແລະ ເຮົາຄວນແບ່ງປັນພຽງແຕ່ເມື່ອພະວິນຍານໄດ້ກະຕຸ້ນທ່ານໃຫ້ໃຊ້ ເພື່ອໃຫ້ພອນແກ່ຄົນອື່ນໆເທົ່ານັ້ນ. (*Ensign*, Jan. 1983, 53).

ໝາຍເຫດ

## ການສຶກສາພະຄຳພີ

ການໄວ້ວາງໃຈຕໍ່ພະວິນຍານເປັນສິ່ງທີ່ສຳຄັນເຊິ່ງພະຜູ້ເປັນເຈົ້າໄດ້ເຕືອນເຮົາຢ່າງໜັກແໜ້ນວ່າເຮົາບໍ່ຄວນປະຕິເສດ ຫລື ລະງັບພະວິນຍານ. ທ່ານໄດ້ຮຽນຮູ້ຫຍັງແດ່ຈາກຂໍ້ພະຄຳພີດັ່ງຕໍ່ໄປນີ້?

| | | |
|---|---|---|
| Jacob 6:8–9 | ມໍມອນ 9:7–9 | D&C 11:25–26 |
| 3 ນີໄຟ 29:5–6 | ໂມໂລໄນ 10:7–8 | 1 ເທຊະໂລນິກ 5:19–20 |

## ໃຫ້ຈື່ຈຳສິ່ງນີ້

- ອະທິຖານດ້ວຍສັດທາເພື່ອຄຳອະທິຖານຂອງທ່ານຈະໄດ້ຮັບຄຳຕອບ.
- ຮຽນຮູ້ທີ່ຈະເຂົ້າໃຈ, ຮູ້ຈັກ, ແລະ ເຮັດຕາມການກະຕຸ້ນຂອງພະວິນຍານ.
- ຮຽນຮູ້ທີ່ຈະໄວ້ວາງໃຈຕໍ່ພະວິນຍານເພື່ອສະແດງໃຫ້ທ່ານຮູ້ບ່ອນທີ່ຈະໄປຫາ, ສິ່ງທີ່ຈະເຮັດ, ແລະ ສິ່ງທີ່ຈະເວົ້າ.
- ໃຫ້ສອນຄົນອື່ນໆວິທີທີ່ຈະຮູ້ຈັກພະວິນຍານ.

ໝາຍເຫດ

# ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

## ການສຶກສາສ່ວນຕົວ

- ບັນທຶກປະສົບການທາງວິນຍານຂອງທ່ານໄວ້ໃນປຶ້ມບັນທຶກປະຈຳວັນຂອງທ່ານ. ຕົວຢ່າງ, ຕອບຄຳ ຖາມດັ່ງເຊັ່ນ: ເຮົາເຂົ້າໃຈບາງສິ່ງບາງຢ່າງດີຂຶ້ນເມື່ອເຮົາສຶກສາພະຄຳພີບໍ? ເຮົາເຄີຍມີໂອກາດທີ່ແປກປະຫລາດໃນການພົບຄົນທີ່ເຮົາສາມາດແບ່ງປັນຂ່າວສານບໍ? ເຮົາໄດ້ຮັບຄຳເວົ້າໃນເວລາຕ້ອງການທັນທີທັນໃດບໍ? ເຮົາມີຄວາມຮູ້ສຶກຮັກແພງຜູ້ຄົນທີ່ເຮົາໄດ້ພົບບໍ? ຄຳອະທິຖານຂອງເຮົາໄດ້ຮັບຄຳຕອບ ດ້ວຍວິທີໃດ?

- ໃຫ້ແບ່ງເຈ້ຍອອກເປັນສອງແຖວ. ເບື້ອງໜຶ່ງໃຫ້ໃສ່ຫົວຂໍ້ວ່າ "ສິ່ງທີ່ພະຜູ້ເປັນເຈົ້າໄດ້ເຮັດ" ແລະ ອີກເບື້ອງໜຶ່ງ "ສິ່ງທີ່ລີໄຮ ຫລື ນີໄຟ ໄດ້ເຮັດ." ອ່ານເລື່ອງລາວກ່ຽວກັບ ເລຍໂຮນາ ແລະ ຄົນທະນູທີ່ຫັກ(1 ນີໄຟ 16:9–30) ຫລື ອ່ານເລື່ອງລາວກ່ຽວກັບ ນີໄຟ ສ້າງເຮືອ (1 ນີໄຟ 17:7–16; 18:1–6). ເມື່ອທ່ານອ່ານ, ໃຫ້ຂຽນເຫດການຈາກເລື່ອງນັ້ນ ໃສ່ໃນເບື້ອງທີ່ເໝາະສົມ. ໃຫ້ໄຕ່ຕອງສິ່ງທີ່ເລື່ອງນັ້ນສາມາດສອນທ່ານກ່ຽວກັບລັກສະນະຂອງການ ເປີດເຜີຍ.

- ໃຫ້ກວດເບິ່ງປຶ້ມບັນທຶກປະຈຳວັນຂອງທ່ານ ແລະ ຊອກຫາຕອນທ່ານໄດ້ຖືກນຳພາດ້ວຍພະວິນຍານ ຫລື ຕອນທ່ານໄດ້ມີປະສົບການກ່ຽວກັບການເປີດເຜີຍ ຫລື ຂອງປະທານແຫ່ງພະວິນຍານຢ່າງອື່ນ. ຄິດກ່ຽວກັບເວລາໃດ, ບ່ອນໃດ ແລະ ເປັນຫຍັງ ປະສົບການເຫລົ່ານີ້ໄດ້ເກີດຂຶ້ນ. ທ່ານໄດ້ເຮັດສິ່ງໃດເປັນພິເສດບໍ່ ເພື່ອຕຽມຕົວທ່ານສຳລັບປະສົບການນີ້? ພະຫັດຂອງພະຜູ້ເປັນເຈົ້າຖືກສະແດງດ້ວຍວິທີໃດໃນປະສົບການນັ້ນ? ທ່ານໄດ້ຮູ້ສຶກແນວໃດຕອນນັ້ນ? ທ່ານສາມາດເຮັດຫຍັງເພື່ອຈະມີປະສົບການຄ້າຍໆກັນນັ້ນ? ການຈື່ຈຳປະສົບການເຫລົ່ານັ້ນ ສາມາດຊ່ອຍເຫລືອທ່ານໃຫ້ຮູ້ຈັກ ແລະ ໄດ້ຮັບພະວິນຍານອີກຄັ້ງໜຶ່ງ.

- ພະທຳ ກິດຈະການ ໃນພະຄຳພີໄບເບິ້ນໄດ້ຖືກເອີ້ນວ່າ "ປຶ້ມກິດຈະການຕ່າງໆຂອງພະວິນຍານບໍລິສຸດ ຜ່ານອັກຄະສາວົກທັງຫລາຍ." ໃຫ້ອ່ານຫົວບົດຂອງປຶ້ມ ກິດຈະການ ແລະ ອະທິບາຍວ່າ ເປັນຫຍັງຫົວຂໍ້ນີ້ຈຶ່ງເໝາະສົມ. ຊອກຫາຫລັກຖານເພື່ອໃຫ້ເຫດຜົນຕໍ່ການອະທິບາຍຂອງທ່ານ.

- ສຶກສາ ແລະ ໄຕ່ຕອງຄຳສັ່ງສອນດັ່ງຕໍ່ໄປນີ້. ມັນມີສ່ວນພົວພັນແນວໃດຕໍ່ກິດຈະກຳເຜີຍແຜ່ປະຈຳວັນຂອງທ່ານ?

  > "ບອກອ້າຍນ້ອງວ່າໃຫ້ຖ່ອມຕົວ ແລະ ມີຄວາມສັດຊື່ ແລະ ໃຫ້ໝັ້ນໃຈທີ່ຈະຮັກສາພະວິນຍານຂອງພະຜູ້ເປັນເຈົ້າ, ວ່າພະວິນຍານຈະນຳພາເຂົາເຈົ້າຢ່າງຖືກຕ້ອງ. ຈົ່ງລະວັງ ແລະ ບໍ່ໃຫ້ຫັນໜີຈາກສຽງຊື່ມເບົາໆດັ່ງແວ່ວນັ້ນ; ມັນຈະສອນເຂົາເຈົ້າໃຫ້ຮູ້ສິ່ງທີ່ຕ້ອງເຮັດ ແລະ ບ່ອນທີ່ຕ້ອງໄປຫາ; ມັນຈະໃຫ້ຜົນແຫ່ງອານາຈັກ. ບອກອ້າຍນ້ອງວ່າໃຫ້ເປີດຈິດໃຈຂອງເຂົາເຈົ້າສູ່ຄວາມໝັ້ນໃຈ, ເພື່ອວ່າເມື່ອພະວິນຍານບໍລິສຸດມາສູ່ເຂົາເຈົ້າ ເຂົາເຈົ້າຈະຕຽມພ້ອມທີ່ຈະຮັບເອົາພະອົງ. ເຂົາເຈົ້າສາມາດຮູ້ຈັກພະວິນຍານຂອງພະຜູ້ເປັນເຈົ້າຈາກວິນຍານອື່ນໆ— ເພາະພະວິນຍານຈະຊື່ມຄວາມສະຫງົບ ແລະ ຄວາມປິຕິຍິນດີເຂົ້າໃນຈິດວິນຍານຂອງເຂົາເຈົ້າ; ພະວິນຍານຈະເອົາຄວາມເຈດຕະນາຮ້າຍ, ຄວາມກຽດຊັງ, ການຜິດຖຽງກັນ ແລະ ຄວາມຊົ່ວທັງໝົດໄປຈາກຈິດໃຈຂອງເຂົາເຈົ້າ, ແລະ ຄວາມປາດຖະໜາທັງໝົດຂອງເຂົາເຈົ້າຈະຄື ຢາກເຮັດຄວາມດີ" (quoted in *Juvenile Instructor*, 19 July 1873, 114).

ໝາຍເຫດ

ສາດສະດາ ໂຢເຊັບ ສະມິດ ໄດ້ໃຫ້ຄຳສັ່ງສອນນີ້ແກ່ ບະລິກຳ ຢັງ ໃນຄວາມຝັນເກືອບສາມປີຫລັງຈາກການຕາຍຂອງໂຢເຊັບ ສະມິດ. ຖ້າທ່ານເປັນບະລິກຳ ຢັງ ແລະ ໄດ້ຮັບການສັ່ງສອນນີ້, ທ່ານຈະເຮັດແນວໃດ?

- ສຶກສາ Alma 33:1–12; ແອລະມາ 34:17–29, Alma 38. ແອລະມາຕອບຄຳຖາມຂໍ້ໃດ? (ທົບທວນ Alma 33:1–2.) ແອລະມາໄດ້ຕອບຄຳຖາມເຫລົ່ານີ້ແນວໃດ? ເພິ່ນໃຫ້ຄວາມເຊື່ອໝັ້ນແນວໃດວ່າພະເຈົ້າຮູ້ຍິນ ແລະ ຕອບຄຳອະທິຖານ?

- ພະຜູ້ເປັນເຈົ້າໄດ້ສັນຍາວ່າ ພະວິນຍານຈະນຳພາເຮົາຫລາຍໆວິທີທີ່ສຳຄັນ. ເມື່ອທ່ານອ່ານຂໍ້ພະຄຳພີດັ່ງຕໍ່ໄປນີ້, ໃຫ້ຊອກເບິ່ງວ່າ ມີພາກສ່ວນຂອງວຽກງານຂອງທ່ານທີ່ຕ້ອງການການນຳພາຈາກພະວິນຍານ. ພະບັນຍັດ ແລະ ຄຳສັນຍາທີ່ມີໃນຂໍ້ພະຄຳພີເຫລົ່ານີ້ມີຄວາມໝາຍແນວໃດສຳລັບການສຶກສາສ່ວນຕົວ ແລະ ການສຶກສາກັບຄູ່ສອນສາດສະໜາຂອງທ່ານ? ສຳລັບການປະຊຸມທ້ອງຖິ່ນ, ກອງປະຊຸມເຂດ, ພິທີບັບຕິດສະມາ, ແລະ ການປະຊຸມອື່ນໆ?

**ການອະທິຖານ**

| | |
|---|---|
| 3 Nephi 19:24 | D&C 46:30 |
| D&C 50:30 | ໂລມ 8:26 |

**ການນຳການປະຊຸມຕ່າງໆ**

| | | |
|---|---|---|
| ໂມໂລໄນ 6:9 | D&C 20:45 | D&C 46:2 |

**ການຂຽນ**

| | | |
|---|---|---|
| D&C 9:9 | D&C 124:4 | D&C 104:81 |
| D&C 47:4 | D&C 24:6 | Moses 6:6 |

- ອ່ານຂໍ້ພະຄຳພີດັ່ງຕໍ່ໄປນີ້ (ຮ່ວມດ້ວຍຫົວຂໍ້ຂອງພາກສ່ວນເຫລົ່ານີ້).

| | | |
|---|---|---|
| D&C 60:1–5 | D&C 61:1–4, 21–22 | D&C 62:4–8 |

ໃນເລື່ອງນີ້, ສິ່ງໃດທີ່ສຳຄັນຫລາຍຕໍ່ພະຜູ້ເປັນເຈົ້າ?

ສິ່ງໃດທີ່ບໍ່ສຳຄັນຕໍ່ພະຜູ້ເປັນເຈົ້າ?

ພິຈາລະນາຂໍ້ຄວາມດັ່ງຕໍ່ໄປນີ້ຂອງ ແອວເດີ ດາລິນ ເອັດ ໂອກ:

"[ບາງຄົນອາດຈະມີ] ຄວາມປາດຖະໜາຫລາຍທີ່ສຸດທີ່ຈະໄດ້ຖືກນຳພາໂດຍພະວິນຍານຂອງພະຜູ້ເປັນເຈົ້າ ແຕ່ວ່າ . . . ມີຄວາມປາດຖະໜາຫລາຍເກີນໄປຈົນເຖິງຂັ້ນຢາກໃຫ້ຖືກນຳພາໃນ *ທຸກ*ສິ່ງ. ຄວາມປາດຖະໜາທີ່ຈະຖືກນຳພາໂດຍພະຜູ້ເປັນເຈົ້າແມ່ນສິ່ງທີ່ໃຫ້ພະລັງ, ແຕ່ມັນຕ້ອງຕິດຕາມດ້ວຍຄວາມເຂົ້າໃຈ ວ່າພະບິດາເທິງສະຫວັນຂອງເຮົາປ່ອຍໃຫ້ເຮົາເລືອກເຮັດການຕັດສິນໃຈຫລາຍໆຢ່າງດ້ວຍຕົວເອງ. ການຕັດສິນໃຈດ້ວຍຕົວເອງແມ່ນໜຶ່ງໃນແຫລ່ງຂອງຄວາມເຕີບໂຕທີ່ເຮົາຕ້ອງປະສົບໃນຊີວິດມະຕະນີ້. ຄົນທີ່ພະຍາຍາມມອບການຕັດສິນໃຈທັງໝົດໃຫ້ແກ່ພະຜູ້ເປັນເຈົ້າ ແລະ ອ້ອນວອນເພື່ອການເປີດເຜີຍໃນການເລືອກທຸກໆຢ່າງ ໃນບໍ່ດົນຈະພົບສະຖານະການເຊິ່ງເຂົາຈະອະທິຖານເພື່ອຮັບການນຳພາ ແຕ່ບໍ່ໄດ້ຮັບມັນເລີຍ. ຕົວຢ່າງເຊັ່ນ, ນີ້ອາດຈະເກີດຂຶ້ນໃນສະຖານະການຫລາຍຢ່າງເຊິ່ງໃນນັ້ນການເລືອກຈະບໍ່ສຳຄັນ ຫລື ເໝາະສົມ.

"ເຮົາຄວນສຶກສາສະພາບການຢູ່ໃນໃຈຂອງເຮົາກ່ອນ, ໃຊ້ອຳນາດຂອງເຫດຜົນທີ່ຜູ້ສ້າງຂອງເຮົາໄດ້ມອບໃຫ້ໃນຕົວເຮົາ. ຫລັງຈາກນັ້ນ ເຮົາຄວນອະທິຖານເພື່ອການນຳພາ ແລະ ເຮັດຕາມນັ້ນຖ້າເຮົາໄດ້ຮັບມັນ. ຖ້າເຮົາບໍ່ໄດ້ຮັບການນຳພາ, ເຮົາຄວນເຮັດຕາມການຕັດສິນ

ໝາຍເຫດ

ໃຈທີ່ດີທີ່ສຸດຂອງເຮົາ. ຄົນທີ່ບໍ່ຍອມທໍ້ຖອຍໃນການ ສະແຫວງຫາການນຳພາໂດຍການເປີດເຜີຍໃນເລື່ອງທີ່ພະຜູ້ເປັນເຈົ້າບໍ່ທັນໄດ້ເລືອກທີ່ຈະຊີ້ນຳ, ແລ້ວຄົນຜູ້ນັ້ນອາດຈະສ້າງຄຳຕອບຂຶ້ນເອງຈາກຄວາມເພີ້ຝັນ ຫລື ການໂນ້ມອຽງ, ຫລື ເຂົາອາດຈະໄດ້ຮັບຄຳຕອບຜ່ານການເປີດເຜີຍທີ່ຜິດ" ("Our Strengths Can Become Our Downfall," *Ensign*, Oct. 1994, 13–14).

ແມ່ນຫຍັງຄືຄວາມສຳພັນລະຫວ່າງການເຮັດຕາມການຕັດສິນໃຈຂອງທ່ານເອງ ແລະ ການອາໄສຕໍ່ພະວິນຍານ?

## ການສຶກສາກັບຄູ່ສອນສາດສະໜາ

- ໃຫ້ເວົ້າລົມກ່ຽວກັບການອະທິຖານທີ່ທ່ານໄດ້ກ່າວນຳກັນ. ມັນໄດ້ຖືກນຳພາໂດຍພະວິນຍານບໍລິສຸດບໍ? ທ່ານໄດ້ຮັບຄຳຕອບຕໍ່ຄຳອະທິຖານຂອງທ່ານບໍ? ເມື່ອທ່ານອະທິຖານນຳກັນ, ທ່ານ:
  - ເຊື່ອວ່າພະເຈົ້າຈະມອບສິ່ງທີ່ທ່ານຂໍຈາກພະອົງໃນຄວາມຂອບທຳບໍ?
  - ຮັບຮູ້ ແລະ ຂອບພະໄທພະອົງສຳລັບຄຳຕອບຕໍ່ຄຳອະທິຖານຂອງທ່ານບໍ?
  - ອະທິຖານເພື່ອຜູ້ຄົນໂດຍຊື່ເຂົາເຈົ້າ ແລະ ພິຈາລະນາເຖິງຄວາມຕ້ອງການຂອງເຂົາເຈົ້າບໍ?
  - ອະທິຖານເພື່ອຄູ່ສອນສາດສະໜາ ແລະ ເພື່ອພະວິນຍານຈະນຳພາທ່ານບໍ?
  - ໄດ້ຮັບຄຳຕອບໃນການອະທິຖານຂອງທ່ານບໍ?

  ສົນທະນາກັນເຖິງວິທີທີ່ທ່ານຈະສະແຫວງຫາພະວິນຍານຢ່າງເອົາໃຈໃສ່ຫລາຍຂຶ້ນ.

- ສົນທະນາກ່ຽວກັບວິທີຕ່າງໆທີ່ຜູ້ຄົນໄດ້ບັນລະຍາຍເຖິງອິດທິພົນຂອງພະວິນຍານບໍລິສຸດ. ຂຽນຄວາມເຫັນທີ່ຜູ້ສົນໃຈເວົ້າກ່ຽວກັບປະສົບການຂອງເຂົາເຈົ້ານຳພະວິນຍານໃນການຮຽນພະກິດຕິຄຸນ ແລະ ການພະຍາຍາມຮັກສາຄຳໝັ້ນສັນຍາ. ທ່ານຈະສາມາດຊ່ອຍເຫລືອໃຫ້ຄົນອື່ນໆໃຫ້ຮູ້ຈັກອິດທິພົນອັນສັກສິດນີ້ໄດ້ແນວໃດ? ທ່ານຈະສາມາດຫລີກລ້ຽງຈາກການມີເລ້ຫລ່ຽມ ເມື່ອທ່ານເຮັດສິ່ງນີ້ໄດ້ແນວໃດ?

- ພິຈາລະນາ ແລະ ສົນທະນາ ວິທີທີ່ຈະເຮັດຕາມຄຳສັ່ງສອນດັ່ງຕໍ່ໄປນີ້ເພື່ອທ່ານຈະນຳໃຊ້ໄດ້: "ທ່ານບໍ່ສາມາດບັງຄັບສິ່ງທາງວິນຍານ. ເຊັ່ນຄຳວ່າ ບັງຄັບ, ຂູ່ເຂັນ, ຈຳກັດ, ກົດດັນ, ບັນຊາ, ບໍ່ໄດ້ເປັນສິດທິພິເສດຂອງເຮົາທີ່ຈະເຮັດຕໍ່ພະວິນຍານ. ທ່ານບໍ່ສາມາດບັງຄັບພະວິນຍານໃຫ້ຕອບສະໜອງ, ຄືກັນກັບທ່ານບໍ່ສາມາດບັງຄັບໃຫ້ແກ່ນໝາກຖົ່ວອອກໜໍ່, ຫລື ບັງຄັບໃຫ້ໄຂ່ຟັກກ່ອນເວລາບໍ່ໄດ້. ທ່ານສາມາດສ້າງສະພາບການເພື່ອສົ່ງເສີມການເຕີບໂຕ, ລ້ຽງດູ, ແລະ ປ້ອງກັນ; ແຕ່ວ່າທ່ານບໍ່ສາມາດໃຊ້ກຳລັງ ຫລື ບັງຄັບ: ທ່ານຕ້ອງຄອຍຖ້າການເຕີບໂຕນັ້ນ" (Boyd K. Packer, "The Candle of the Lord," *Ensign*, Jan. 1983, 53).

- ພິຈາລະນາຂໍ້ຄວາມດັ່ງຕໍ່ໄປນີ້ ແລະ ວິທີທີ່ຫລັກທຳເຫລົ່ານີ້ສາມາດປ່ຽນແປງການອະທິຖານ ແລະ ວຽກງານຂອງທ່ານ. ການອະທິຖານຂອງທ່ານມີອິດທິພົນຕໍ່ການວາງແຜນ, ການຕັ້ງເປົ້າໝາຍ, ວຽກງານ, ແລະ ກິດຈະກຳແຕ່ລະວັນຂອງທ່ານໄດ້ແນວໃດ?

  "ການກະທຳຂອງເຮົາ, ໃນສ່ວນໃຫຍ່ແລ້ວ, ແມ່ນຜົນທີ່ອອກມາຈາກການອະທິການຂອງເຮົາ. ຫລັງຈາກເຮົາອະທິຖານແລ້ວ, ເຮົາໄດ້ລົງມືເຮັດ; ຄຳຂໍຮ້ອງທີ່ເໝາະສົມໃນຄຳອະທິຖານ

ໝາຍເຫດ

ຂອງເຮົາມີຜົນສະທ້ອນໃນການນຳພາເຮົາໃຫ້ເຮັດສິ່ງທີ່ຊອບທຳ" (Bruce R. McConkie, "Why the Lord Ordained Prayer," *Ensign*, Jan. 1976, 12).

"ການອະທິຖານທີ່ເອົາໃຈໃສ່ ໝາຍຄວາມວ່າເມື່ອເຮົາທູນຂໍພອນ ຫລື ຄຸນນະທຳອັນໃດອັນໜຶ່ງ ເຮົາຄວນໃຊ້ຄວາມພະຍາຍາມເພື່ອຈະໄດ້ພອນນັ້ນ ແລະ ຮັກສາຄຸນນະທຳນັ້ນໄວ້" (David O. McKay, *Secrets of a Happy Life*, 114–15).

"ຂໍໃຫ້ [ພະເຈົ້າ] ສົ່ງທ່ານໄປບ່ອນທີ່ພະອົງຕ້ອງການທ່ານ, ແລະ ບອກທ່ານໃຫ້ຮູ້ສິ່ງທີ່ພະອົງຢາກໃຫ້ທ່ານເຮັດ ແລະ ຮູ້ສຶກວ່າທ່ານໄດ້ຕຽມພ້ອມແລ້ວທີ່ຈະເຮັດ" (Brigham Young, *Discourses of Brigham Young*, sel. John A. Widtsoe [1954], 46).

## ການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດ

- ສະເໜີບົດຮຽນໃນການໃຊ້ຖ້ອຍຄຳທີ່ເໝາະສົມ ແລະ ຢ່າງນັບຖືໃນການອະທິຖານ.
- ເມື່ອເວລາເໝາະສົມ, ໃຫ້ຜູ້ສອນສາດສະໜາທັງຫລາຍແບ່ງປັນເລື່ອງລາວ ຫລື ປະສົບການທີ່ເຂົາເຈົ້າໄດ້ຍິນໃນການປະຊຸມປະຈັກພະຍານທີ່ບໍ່ດົນມານີ້, ໃນປະສົບການສອນ, ຫລື ໃນບ່ອນອື່ນ. ເລື່ອງ ແລະ ປະສົບການທາງວິນຍານທີ່ຄົນອື່ນໆເວົ້າໃຫ້ຟັງ ສາມາດຊ່ອຍເຫລືອທ່ານໃຫ້ພັດທະນາສັດທາ ແລະ ຮູ້ຈັກວ່າອິດທິພົນຂອງພະວິນຍານໄດ້ສະແດງອອກຢ່າງກວ້າງຂວາງ ແລະ ເລື້ອຍໆ.
- ສະແດງເຖິງຄວາມຮູ້ບູນຄຸນເຖິງການສະແດງຂອງພະຫັດຂອງພະຜູ້ເປັນເຈົ້າໃນວຽກງານຂອງທ່ານ (see D&C 59:21). ສົນທະນາກ່ຽວກັບວິທີທີ່ການສະແດງຄວາມຮູ້ບູນຄຸນໄດ້ຊ່ອຍເຫລືອທ່ານໃຫ້ເຫັນສິ່ງເລັກນ້ອຍ ແຕ່ເປັນສິ່ງທີ່ສຳຄັນ ເຊິ່ງພະຜູ້ເປັນເຈົ້າໄດ້ໃຫ້ພອນທ່ານແນວໃດ (see Ether 3:5).
- ຂໍໃຫ້ຜູ້ສອນສາດສະໜາທັງຫລາຍເວົ້າເຖິງພາລະກິດ ແລະ ອຳນາດຂອງພະວິນຍານບໍລິສຸດ.
- ຂໍໃຫ້ຜູ້ປ່ຽນໃຈເຫລື້ອມໃສໃນບໍ່ດົນມານີ້ ເວົ້າເຖິງເລື່ອງລາວກ່ຽວກັບວິທີທີ່ເຂົາເຈົ້າໄດ້ຮັບອິດທິພົນ ໂດຍພະວິນຍານໃນຖານະເປັນຜູ້ສົນໃຈແນວໃດ.

## ປະທານເຜີຍແຜ່

- ບາງຄັ້ງບາງຄາວ ໃນຈົດໝາຍທີ່ຜູ້ສອນສາດສະໜາຂຽນຫາທ່ານແຕ່ລະອາທິດ, ຂໍໃຫ້ເຂົາເຈົ້າບອກກ່ຽວກັບປະສົບການທາງວິນຍານທີ່ເໝາະສົມຂອງເຂົາເຈົ້ານຳອີກ.
- ໃນການສຳພາດ, ບາງຄັ້ງບາງຄາວ ໃຫ້ຖາມຜູ້ສອນສາດສະໜາກ່ຽວກັບການອະທິຖານຂອງເຂົາເຈົ້າຕອນເຊົ້າ ແລະ ຕອນແລງ. ຖາມເຂົາເຈົ້າວ່າ ເຂົາເຈົ້າຮູ້ສຶກວ່າ ການອະທິຖານຂອງເຂົາເຈົ້າມີຄວາມສຳຄັນຫລືບໍ່.
- ຖາມຜູ້ສອນສາດສະໜາກ່ຽວກັບວິທີທີ່ເຂົາເຈົ້າຊ່ອຍເຫລືອໃຫ້ຜູ້ສົນໃຈຮູ້ສຶກ ແລະ ຮູ້ຈັກພະວິນຍານ.
- ເມື່ອເວລາເໝາະສົມ, ບອກຜູ້ສອນສາດສະໜາກ່ຽວກັບ ວິທີທ່ານໄດ້ຮັບການເປີດເຜີຍກ່ຽວກັບການ ຍ້າຍຜູ້ສອນສາດສະໜາ, ຜູ້ສອນສາດສະໜາທີ່ບໍ່ເຊື່ອຟັງ ຫລື ຕ້ອງການຄວາມຊ່ອຍເຫລືອ, ແລະ ຄຳສອນເພື່ອ ຈະສອນ.

ໝາຍເຫດ



# ພະຄຳພີມໍມອນມີບົດບາດຫຍັງແດ່?

ໝາຍເຫດ

## ໃຫ້ພິຈາລະນາເລື່ອງນີ້

- ພະຄຳພີມໍມອນເປັນຫີນສຳຄັນຂອງສາດສະໜາຂອງເຮົາແນວໃດ?
- ພະຄຳພີມໍມອນຕອບຄຳຖາມທີ່ຍິ່ງໃຫຍ່ແຫ່ງຈິດວິນຍານຂອງມະນຸດແນວໃດ?
- ເປັນຫຍັງພະຄຳພີມໍມອນຈຶ່ງມີອຳນາດໃນຂັ້ນຕອນການປ່ຽນແປງ?
- ເຮົາຄວນໃຊ້ພະຄຳພີມໍມອນເພື່ອສ້າງສັດທາ ແລະ ຊ່ອຍເຫລືອໃຫ້ຄົນອື່ນໆເຂົ້າໃກ້ຊິດພະເຈົ້າໃຫ້ຫລາຍຂຶ້ນແນວໃດ?
- ເປັນຫຍັງຄຳສັນຍາໃນ ໂມໂລໄນ 10:3—5 ຈຶ່ງເປັນຈຸດສຳຄັນຂອງວຽກງານເຜີຍແຜ່?

ພະຄຳພີມໍມອນເປັນຫລັກຖານທີ່ມີອຳນາດແຫ່ງຄວາມສັກສິດຂອງພະຄິດ. ອີກຢ່າງໜຶ່ງ ມັນເປັນຫລັກຖານຂອງການຟື້ນຟູຜ່ານສາດສະດາ ໂຢເຊັບ ສະມິດ. ສ່ວນທີ່ສຳຄັນໃນການປ່ຽນແປງແມ່ນການໄດ້ຮັບປະຈັກພະຍານຈາກພະວິນຍານບໍລິສຸດວ່າພະຄຳພີມໍມອນແມ່ນຄວາມຈິງ. ໃນຖານະເປັນຜູ້ສອນສາດສະໜາ, ທຳອິດທ່ານຕ້ອງມີປະຈັກພະຍານສ່ວນຕົວວ່າພະຄຳພີມໍມອນແມ່ນຄວາມຈິງ. ປະຈັກພະຍານນີ້ສາມາດນຳສູ່ສັດທາທີ່ເລິກຊຶ້ງ ແລະ ຕະຫລອດໄປໃນອຳນາດຂອງພະຄຳພີມໍມອນໃນຂັ້ນຕອນການປ່ຽນແປງ. ໃຫ້ມີຄວາມໝັ້ນໃຈວ່າພະວິນຍານບໍລິສຸດຈະສະແດງປະຈັກພະຍານຕໍ່ທຸກຄົນຜູ້ທີ່ອ່ານ ແລະ ໄຕ່ຕອງພະຄຳພີມໍມອນ ແລະ ຖາມພະເຈົ້າວ່າມັນແມ່ນຄວາມຈິງຫລືບໍ່ດ້ວຍຄວາມຈິງໃຈ, ດ້ວຍເຈດຕະນາທີ່ແທ້ຈິງ ແລະ ດ້ວຍສັດທາໃນພະຄິດ. ພະຍານຂອງພະວິນຍານບໍລິສຸດນີ້ຄວນຈະເປັນຈຸດສຳຄັນໃນການຕັ້ງໃຈໃສ່ການສອນຂອງທ່ານ.

## ພະຄຳພີມໍມອນເປັນຫີນສຳຄັນຂອງສາດສະໜາຂອງເຮົາ

ສາດສະດາ ໂຢເຊັບ ສະມິດ ໄດ້ສອນວ່າ ພະຄຳພີມໍມອນເປັນ "ຫີນສຳຄັນຂອງສາດສະໜາຂອງເຮົາ" (ຄຳນຳຕໍ່ພະຄຳພີມໍມອນ). ໃນໂອກາດໜຶ່ງເພິ່ນກ່າວວ່າ: "ຖ້າບໍ່ມີພະຄຳພີມໍມອນ ແລະ ການເປີດເຜີຍ, ແລ້ວສາດສະໜາຂອງເຮົາຢູ່ໃສ? ເຮົາຈະບໍ່ມີຫຍັງເລີຍ" (*History of the Church*, 2:52).




ປະຕູໂຄ້ງເປັນໂຄງຮ່າງການສ້າງທີ່ເຂັ້ມແຂງເຮັດຈາກຫີນຫລາຍກ້ອນປອງກັນຂຶ້ນແຕ່ລະເບື້ອງ. ຫີນກ້ອນຢູ່ທາງກາງ ຫລື ຫີນສຳຄັນ ຕາມທຳມະດາແລ້ວຈະໃຫຍ່ກວ່າຫີນກ້ອນອື່ນໆ ແລະ ມັນຈະຈອດຫີນທັງສອງເບື້ອງເຂົ້າກັນເປັນປະຕູໂຄ້ງ.

ໝາຍເຫດ

ເມື່ອ ໂຢເຊັບ ສະມິດເອີ້ນພະຄຳພີມໍມອນວ່າ “ຫີນສຳຄັນຂອງສາດສະໜາຂອງເຮົາ,” ເພິ່ນໄດ້ສອນວ່າພະຄຳພີມໍມອນເປັນສິ່ງທີ່ເຮັດໃຫ້ສາດສະໜາຂອງເຮົາມີຢູ່. ປະທານ ເອດສະລາ ແທັບ ເບັນສັນ ໄດ້ກ່າວວ່າ ພະຄຳພີມໍມອນເປັນຫລັກສຳຄັນຢ່າງໜ້ອຍທີ່ສຸດສາມຢ່າງ:

**ປະຈັກພະຍານກ່ຽວກັບພະຄິດ.** “ພະຄຳພີມໍມອນເປັນຫີນສຳຄັນໃນປະຈັກພະຍານກ່ຽວກັບພະເຢຊູຄິດ, ຜູ້ເປັນພື້ນຖານທີ່ສຳຄັນໃນທຸກສິ່ງທຸກຢ່າງທີ່ເຮົາເຮັດ. ພະຄຳພີມໍມອນເປັນພະຍານກ່ຽວກັບຄວາມຈິງຂອງພະອົງດ້ວຍອຳນາດ ແລະ ຄວາມແຈ່ມແຈ້ງ.”

**ຄວາມສົມບູນຂອງຄຳສອນ.** “ພະຜູ້ເປັນເຈົ້າເອງໄດ້ກ່າວວ່າພະຄຳພີມໍມອນບັນຈຸດ້ວຍ ‘ຄວາມສົມບູນຂອງພະກິດຕິຄຸນຂອງພະເຢຊູຄິດ.’ (see D&C 20:9.) . . . ໃນພະຄຳພີມໍມອນເຮົາຈະເຫັນຄວາມສົມບູນຂອງຄຳສອນເຫລົ່ານັ້ນເພື່ອຄວາມຕ້ອງການສຳລັບຄວາມລອດຂອງເຮົາ. ແລະ ຄຳສອນຖືກສອນຢ່າງແຈ່ມແຈ້ງ ແລະ ງ່າຍ ເພື່ອວ່າແມ້ແຕ່ເດັກນ້ອຍກໍສາມາດຮຽນຮູ້ຫົນທາງແຫ່ງຄວາມລອດ ແລະ ຄວາມສູງສົ່ງໄດ້.”



**ພື້ນຖານຂອງປະຈັກພະຍານ.** “ປະຕູໂຄ້ງຈະລົ້ມລະລາຍຖ້າເອົາຫີນສຳຄັນອອກຈາກບ່ອນຕໍ່ທາງກາງ, ສະນັ້ນການຄົງທົນ ຫລື ລົ້ມລະລາຍຂອງສາດສະໜາຈັກ ແມ່ນຂຶ້ນຢູ່ກັບຄວາມເປັນຈິງຂອງພະຄຳພີມໍມອນ. ສັດຕູທັງຫລາຍຂອງສາດສະໜາຈັກເຂົ້າໃຈສິ່ງນີ້ຢ່າງແຈ່ມແຈ້ງ. ນີ້ຄືເຫດຜົນທີ່ເຂົາເຈົ້າໄດ້ພະຍາຍາມຢ່າງໜັກທີ່ຈະພິສູດວ່າ ພະຄຳພີມໍມອນບໍ່ຈິງ, ເພາະຖ້າພະຄຳພີມໍມອນເສຍຄວາມເຊື່ອຖືແລ້ວ ສາດສະດາ ໂຢເຊັບ ສະມິດ ກໍຈະເສຍຄວາມເຊື່ອຖືເໝືອນກັນ. ການອ້າງສິດຕໍ່ກະແຈແຫ່ງຖານະປະໂລຫິດ, ແລະ ການເປີດເຜີຍ, ແລະ ການຟື້ນຟູຄືນມາໃໝ່ຂອງສາດສະໜາຈັກກໍເໝືອນກັນ. ແຕ່ໃນຄ້າຍໆກັນແລ້ວ, ຖ້າພະຄຳພີມໍມອນແມ່ນຄວາມຈິງ—ແລະ ດຽວນີ້ມີຄົນເປັນຫລາຍລ້ານຄົນ ໄດ້ສະແດງປະຈັກພະຍານວ່າເຂົາເຈົ້າມີປະຈັກພະຍານຈາກພະວິນຍານບໍລິສຸດ ວ່າມັນເປັນຄວາມຈິງແທ້ໆ—ດັ່ງນັ້ນ ຄົນຕ້ອງຍອມຮັບຂໍ້ອ້າງວ່າການຟື້ນຟູ ແລະ ທຸກຢ່າງທີ່ຮ່ວມໃນນັ້ນ ກໍເປັນຄວາມຈິງຄືກັນ” (*A Witness and a Warning* [1988], 18–19).

ພະຄຳພີມໍມອນ, ຮ່ວມນຳພະວິນຍານ, ຄືແຫລ່ງທີ່ມີອຳນາດທີ່ສຸດໃນການປ່ຽນແປງຂອງທ່ານ. ມັນເປັນໜັງສືທີ່ຖືກຕ້ອງທີ່ສຸດໃນຈຳນວນໜັງສືອື່ນໆໃນໂລກ (ເບິ່ງຄຳນຳຕໍ່ພະຄຳພີມໍມອນ). ມັນສອນຄຳສອນຂອງພະກິດຕິຄຸນຢ່າງແຈ່ມແຈ້ງ, ໂດຍສະເພາະຢູ່ໃນບົດຮຽນທີ່ທ່ານສອນໃຫ້ຜູ້ສົນໃຈ. ໃຫ້ໃຊ້ພະຄຳພີມໍມອນເປັນແຫລ່ງສຳຄັນໃນການສອນພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່. ຕໍ່ໄປນີ້ຄືຕົວຢ່າງຂອງຄວາມຈິງທີ່ສອນຢ່າງແຈ່ມແຈ້ງໃນພະຄຳພີມໍມອນ ເຊິ່ງທ່ານຈະໄດ້ສອນໃຫ້ຜູ້ສົນໃຈ.

| ບົດຮຽນຂອງຜູ້ສອນສາດສະໜາ | ຄຳສອນ | ຂໍ້ອ້າງອີງ |
|---|---|---|
| ຂ່າວສານຂອງການຟື້ນຟູພະກິດຕິຄຸນຂອງພະເຢຊູຄິດ | ການປະຖິ້ມຄວາມເຊື່ອ, ການຟື້ນຟູ, ໂຢເຊັບ ສະມິດ, ອຳນາດຖານະປະໂລຫິດ | 1 Nephi 12–14<br>2 ນີໄຟ 3; 2 Nephi 26–29;<br>2 ນີໄຟ 29; ໂມໄຊຢາ 18 |
| ແຜນແຫ່ງຄວາມລອດ | “ແຜນອັນຍິ່ງໃຫຍ່ຂອງພະເຈົ້າຜູ້ສະຖິດນິລັນດອນ,” ຮ່ວມດ້ວຍການຕົກຂອງອາດາມ, ການຊົດໃຊ້, ຄວາມເປັນຄືນມາຈາກຕາຍ, ແລະ ການພິພາກສາ. | 2 ນີໄຟ 2; 9<br>ໂມໄຊຢາ 3; Mosiah 15<br>ແອລະມາ 12; 40–42 |
| ພະກິດຕິຄຸນຂອງພະເຢຊູຄິດ | ສັດທາໃນພະຄິດ, ການກັບໃຈ, ການຮັບບັບຕິດສະມາ, ຂອງປະທານແຫ່ງພະວິນຍານບໍລິສຸດ, ແລະ ການອົດທົນຈົນເຖິງທີ່ສຸດ | 2 ນີໄຟ 31–32<br>3 ນີໄຟ 11; 27 |
| ພະບັນຍັດ; ກົດ ແລະ ພິທີການ | ພິທີການດັ່ງເຊັ່ນ ບັບຕິດສະມາ, ການຢືນຢັນ, ການແຕ່ງຕັ້ງຖານະປະໂລຫິດ, ແລະ ສິນລະລຶກ | 3 ນີໄຟ 11:22–28; 18<br>ໂມໂລໄນ 2–6 |

ໝາຍເຫດ

## ກິດຈະກຳ: ການສຶກສາສ່ວນຕົວ

ຂຽນຕອບຄຳຖາມດັ່ງຕໍ່ໄປນີ້ໃນປຶ້ມບັນທຶກການສຶກສາຂອງທ່ານ:

- ການສຶກສາພະຄຳພີມໍມອນໄດ້ມີອິດທິພົນແນວໃດຕໍ່ປະຈັກພະຍານຂອງທ່ານກ່ຽວກັບພະເຢຊູຄຣິດ?
- ທ່ານສາມາດໃຊ້ພະຄຳພີມໍມອນເພື່ອຊ່ອຍໃຫ້ປະຈັກພະຍານຂອງຄົນອື່ນໆເຂັ້ມແຂງຂຶ້ນໄດ້ແນວໃດ?

## ການສຶກສາພະຄຳພີ

**ພະຜູ້ຊ່ອຍໃຫ້ລອດກ່າວຫຍັງແດ່ກ່ຽວກັບພະຄຳພີມໍມອນ?**

| | | |
|---|---|---|
| D&C 1:29 | D&C 19:26–27 | D&C 42:12 |
| D&C 3:19–20 | D&C 20:5–16 | Moses 7:62 |
| D&C 17:6 | D&C 33:16 | |


ຮູບນີ້ອະນຸຍາດໃຫ້ໃຊ້ຈາກ C. Harrison Conroy Co., Inc. ຫ້າມລອກແບບ.

## ພະຄຳພີມໍມອນເປັນພະຍານກ່ຽວກັບພະຄຣິດ

ຈຸດປະສົງອັນສຳຄັນຂອງພະຄຳພີມໍມອນຄືການເຮັດໃຫ້ຜູ້ຄົນເຊື່ອວ່າພະເຢຊູຄຣິດ ພະຄຣິດ (ເບິ່ງໜ້າຫົວຂໍ້ຂອງພະຄຳພີມໍມອນ). ມັນເປັນປະຈັກພະຍານກ່ຽວກັບພະຄຣິດໂດຍຢືນຢັນຄວາມຈິງຂອງຊີວິດ, ພາລະກິດ, ແລະ ອຳນາດຂອງພະອົງ. ມັນໄດ້ສອນຄຳສອນທີ່ແທ້ຈິງກ່ຽວກັບການຊົດໃຊ້—ເຊິ່ງແມ່ນພື້ນຖານຂອງແຜນແຫ່ງຄວາມລອດ. ຫລາຍໆຄົນທີ່ໄດ້ຂຽນເລື່ອງກ່ຽວກັບພະຄຣິດທີ່ມີຢູ່ໃນພະຄຳພີມໍມອນໄດ້ເຫັນພະຄຣິດດ້ວຍຕົວຂອງເຂົາເຈົ້າເອງ. ນ້ອງຊາຍຂອງ ຢາເລັດ, ນີໄຟ, ແລະ ຢາໂຄບ ໄດ້ເຫັນພະຄຣິດກ່ອນພະອົງມາເກີດໃນໂລກນີ້. ມໍມອນ ແລະ ໂມໂລໄນ ໄດ້ເຫັນພະຄຣິດຫລັງຈາກພະອົງໄດ້ເປັນຄືນມາຈາກຕາຍແລ້ວ. ນອກຈາກນັ້ນແລ້ວ, ຝູງຊົນຈຳນວນຫລາຍໄດ້ເຫັນພະຜູ້ຊ່ອຍໃຫ້ລອດຕອນພະອົງສອນສາດສະໜາໃນລະຍະສັ້ນ ແຕ່ມີອຳນາດທ່າມກາງຊາວນີໄຟ (ເບິ່ງ 3 ນີໄຟ 11–28). ຄົນທີ່ຮູ້ໜ້ອຍ ຫລື ບໍ່ຮູ້ຫຍັງເລີຍກ່ຽວກັບພະຜູ້ຊ່ອຍໃຫ້ລອດ ຈະຮູ້ພະອົງໂດຍການອ່ານ, ການໄຕ່ຕອງ, ແລະ ການອະທິຖານກ່ຽວກັບພະຄຳພີມໍມອນ.

ປະຈັກພະຍານຂອງພະຄຳພີມໍມອນຢືນຢັນປະຈັກພະຍານຂອງພະຄຳພີໄບເບິນວ່າ ພະເຢຊູຄຣິດ ພະບຸດອົງດຽວທີ່ຖືກຳເນີດຂອງພະເຈົ້າ ແລະ ພະຜູ້ຊ່ອຍໃຫ້ລອດຂອງໂລກ. ເມື່ອທ່ານສອນຄວາມສົມບູນຂອງພະກິດຕິຄຸນຂອງພະເຢຊູຄຣິດ, ທ່ານຈະສະແດງປະຈັກພະຍານກ່ຽວກັບພະຜູ້ຊ່ອຍໃຫ້ລອດ ແລະ ພະຜູ້ໄຖ່ຂອງໂລກເລື້ອຍໆ. ດ້ວຍອຳນາດຂອງພະວິນຍານບໍລິສຸດ, ທ່ານຈະເປັນພະຍານທີ່ມີຊີວິດຢູ່ກ່ຽວກັບຄວາມຈິງຂອງຂ່າວສານນີ້.

## ການສຶກສາພະຄຳພີ

**ສາດສະດາທັງຫລາຍຢູ່ໃນພະຄຳພີມໍມອນມີເຫດຜົນຫຍັງແດ່ໃນການຂຽນບັນທຶກຂອງເຂົາເຈົ້າ?**

| | | |
|---|---|---|
| 1 ນີໄຟ 6:4–6 | 2 ນີໄຟ 33:13–15 | Words of Mormon 1:3–8 |
| 1 Nephi 9:3–5 | Jacob 1:4–7 | Alma 37:2, 14 |
| 2 ນີໄຟ 4:15–16 | Jacob 4:1–6, 12 | 3 Nephi 5:14–15 |
| 2 Nephi 25:23–29 | ອີນັດ 1:13 | ມໍມອນ 8:35 |
| 2 Nephi 26:15–16 | Jarom 1:2 | D&C 3:16–20 |
| 2 ນີໄຟ 29:11–14 | Omni 1:25–26 | D&C 10:46–48 |

ໝາຍເຫດ

## ພະຄຳພີມໍມອນ ແລະ ພະຄຳພີໄບເບິ້ນສະໜັບສະໜູນເຊິ່ງກັນແລະກັນ

ຜູ້ຄົນມີຄວາມເຊື່ອແຕກຕ່າງກັນຫລາຍກ່ຽວກັບພະຄຳພີໄບເບິ້ນ. ບາງຄົນເຊື່ອວ່າພະຄຳພີໄບເບິ້ນເປັນໜັງສືທີ່ດີເລີດ, ປາດສະຈາກຂໍ້ຜິດພາດ, ແລະ ວ່າມັນເປັນສິ່ງດຽວເທົ່ານັ້ນທີ່ເຮົາຕ້ອງການສຳລັບຄວາມລອດ. ບາງຄົນຄິດວ່າ ພະຄຳພີໄບເບິ້ນເປັນວັນນະຄະດີທີ່ມີຄ່າຄວນເພື່ອການສຶກສາ, ແຕ່ເຂົາເຈົ້າປະຕິເສດວ່າມັນເປັນຫລັກຖານຂອງຄວາມສັກສິດ ແລະ ສິ່ງມະຫັດສະຈັນຂອງພະຄິດ ຫລື ການເປີດເຜີຍໂດຍກົງຈາກພະເຈົ້າ. ບາງຄົນເລືອກທີ່ຈະບໍ່ສົນໃຈພະຄຳພີໄບເບິ້ນ, ແລະ ບາງຄົນບໍ່ເຄີຍເຫັນພະຄຳພີໄບເບິ້ນ ຫລື ມີໂອກາດທີ່ຈະອ່ານມັນເລີຍ.

ສິດທິຊົນຍຸກສຸດທ້າຍ "ເຊື່ອວ່າພະຄຳພີໄບເບິ້ນເປັນພະຄຳຂອງພະເຈົ້າຕາບໃດທີ່ແປມັນຖືກຕ້ອງ" (ຫລັກແຫ່ງຄວາມເຊື່ອ 1:8). ພະຄຳພີມໍມອນບໍ່ໄດ້ແຂ່ງຂັນກັບພະຄຳພີໄບເບິ້ນ, ພະຄຳພີມໍມອນສະໜັບສະໜູນມັນ, ແນະນຳເຮົາໃຫ້ອ່ານມັນ, ແລະ ເປັນພະຍານກ່ຽວກັບຄວາມຈິງຂອງຂ່າວສານຂອງມັນ. ທ່ານຄວນໃຊ້ພະຄຳພີມໍມອນ ແລະ ພະຄຳພີໄບເບິ້ນເພື່ອສະໜັບສະໜູນກັນແລະກັນ.

ພະຄຳພີມໍມອນກ່າວເຖິງພັນທະສັນຍາອັນເກົ່າແກ່ທີ່ພະເຈົ້າໄດ້ເຮັດໄວ້ນຳລູກໆຂອງພະອົງ; ພະຄຳພີໄບເບິ້ນໄດ້ກ່າວເຖິງສາດສະດາທັງຫລາຍທີ່ຍິ່ງໃຫຍ່ຜູ້ທີ່ໄດ້ຮັບພັນທະສັນຍາເຫລົ່ານີ້ໂດຍສັດທາ. ພະຄຳພີມໍມອນເປັນປະຈັກພະຍານກ່ຽວກັບພະຄິດ ແລະ ການຊົດໃຊ້ຂອງພະອົງ; ພະຄຳພີໄບເບິ້ນໄດ້ໃຫ້ເລື່ອງລາວກ່ຽວກັບການເກີດ, ພາລະກິດ, ການສິ້ນພະຊົນ, ການຊົດໃຊ້, ແລະ ການເປັນຄືນມາຈາກຕາຍຂອງພະອົງ. ສະນັ້ນ ພະຄຳພີໄບເບິ້ນ ແລະ ພະຄຳພີມໍມອນຈຶ່ງສົ່ງເສີມກັນ ແລະ ເຮັດໃຫ້ກັນແລະກັນສົມບູນຂຶ້ນ.

ສະບັບພິມການແປພະຄຳພີໄບເບິ້ນເປັນພາສາອັງກິດຂອງກະສັດເຈມ ທີ່ໃຊ້ໂດຍສາດສະໜາຈັກຂອງພະເຢຊູຄິດແຫ່ງສິດທິຊົນຍຸກສຸດທ້າຍ ແລະ ພະຄຳພີມໍມອນມີຄຳທີ່ເບິ່ງໃສ່ກັນ ແລະ ມີສິ່ງທີ່ຊ່ອຍການສຶກສາ ທີ່ເຮັດໃຫ້ງ່າຂອງຢູດາ (ພະຄຳພີໄບເບິ້ນ) ແລະ ງ່າຂອງໂຢເຊັບ (ພະຄຳພີມໍມອນ) ເປັນຄືງ່າດຽວ (ເບິ່ງ ເອເສກຽນ 37:15–17; see 1 Nephi 13:34–41; ເບິ່ງ 2 ນີໄຟ 3:12; 29:8 ນຳອີກ). ໃຫ້ໃຊ້ຂໍ້ພະຄຳພີຈາກພະຄຳພີມໍມອນ ກ່ອນໃຊ້ຂໍ້ພະຄຳພີອື່ນເມື່ອທ່ານສອນ, ແຕ່ໃຫ້ສະແດງວິທີທີ່ພະຄຳພີມໍມອນ ແລະ ພະຄຳພີ ໄບເບິ້ນໄດ້ສອນຫລັກທຳອັນດຽວກັນແນວໃດຕື່ມອີກ.

ໃຊ້ພະຄຳພີມໍມອນເພື່ອອະທິບາຍຂໍ້ພະຄຳພີໃນພະຄຳພີໄບເບິ້ນ ແລະ ເຮັດໃຫ້ຂໍ້ເຫລົ່ານັ້ນແຈ່ມແຈ້ງຂຶ້ນ. ຕົວຢ່າງເຊັ່ນ, ພະຄຳພີໃໝ່ໄດ້ກ່າວວ່າ ພະຄິດໄດ້ຮັບບັບຕິສະມາເພື່ອ "ເຮັດໃຫ້ສຳເລັດທຸກຢ່າງຕາມທີ່ພະເຈົ້າປະສົງ" (ມັດທາຍ 3:14–15). ພະຄຳພີມໍມອນໄດ້ອະທິບາຍເຖິງຄວາມໝາຍຂອງຖ້ອຍຄຳນີ້ (ເບິ່ງ 2 ນີໄຟ 31:5–9).

ເມື່ອທ່ານໃຊ້ພະຄຳພີມໍມອນ ແລະ ພະຄຳພີໄບເບິ້ນຄຽງຄູ່ກັນໄປ, ພະຄຳພີເຫລົ່ານີ້ຈະເອົາຊະນະການໂຕ້ຖຽງ ແລະ ແກ້ໄຂຄຳສອນທີ່ຜິດໃຫ້ຖືກຕ້ອງ (ເບິ່ງ 2 ນີໄຟ 3:12).

ພະຄຳພີໄບເບິ້ນໄດ້ສອນສິ່ງດັ່ງຕໍ່ໄປນີ້ກ່ຽວກັບກົດແຫ່ງພະຍານ: "ຂໍ້ກ່າວຫາໃດໆຕ້ອງມີພະຍານສອງ ຫລື ສາມປາກຈຶ່ງເປັນທີ່ເຊື່ອຖືໄດ້" (2 ໂກລິນໂທ 13:1). ໃນຄວາມສອດຄ່ອງກັບກົດນີ້, ພະຄຳພີມໍມອນ ແລະ ພະຄຳພີໄບເບິ້ນທັງສອງສະບັບຈຶ່ງເປັນປະຈັກພະຍານກ່ຽວກັບພະຄິດ.

### ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ

ຂອກຫາຄຳທີ່ເບິ່ງໃສ່ກັນຕາມຫົວຂໍ້ດັ່ງຕໍ່ໄປນີ້ໃນພະຄຳພີມໍມອນ ແລະ ພະຄຳພີໄບເບິ້ນ. ມີຕົວຢ່າງໃນວົງເລັບຫລັງຈາກແຕ່ລະຫົວຂໍ້. ໃຫ້ຕື່ມຂໍ້ພະຄຳພີ ແລະ ຫົວຂໍ້ຂອງທ່ານໃສ່ເອງ.

- ສາດສະດາ (ອາໂມດ 3:7 ແລະ Jacob 4:4–6)
- ການປະຖິ້ມຄວາມເຊື່ອ (2 ຕີໂມທີ 4:3–4 ແລະ 2 Nephi 28)
- ການຟື້ນຟູ (ກິດຈະການ 3:19–21 ແລະ 1 Nephi 13:34–42)
- ລູກໆຂອງພະເຈົ້າ (ກິດຈະການ 17:29 ແລະ 1 ນີໄຟ 17:36)

ໝາຍເຫດ

## ການສຶກສາພະຄຳພີ

**ພະຄຳພີໄບເບິ້ນກ່າວຫຍັງແດ່ກ່ຽວກັບພະຄຳພີມໍມອນ?**

ໂຢຮັນ 10:16
ເອຊາຢາ 29:4, 11–18
ເອເສກຽນ 37:15–17
Guide to the Scriptures, "Ephraim," subheading: *The Stick of Ephraim or Joseph*

**ພະຄຳພີມໍມອນກ່າວຫຍັງແດ່ກ່ຽວກັບພະຄຳພີໄບເບິ້ນ?**

1 Nephi 13:20–29, 40–41
2 ນີໄຟ 29:3–14
3 ນີໄຟ 23:1
ມໍມອນ 7:8–9

**ພະຄຳພີສອງສະບັບນີ້ເປັນປະຈັກພະຍານກ່ຽວກັບພະຄິດແນວໃດ?**

2 ນີໄຟ 29:8
ໂຢຮັນ 20:31
ກິດຈະການ 10:43

## ພະຄຳພີມໍມອນຕອບຄຳຖາມຂອງຈິດວິນຍານ

ປະທານ ເອຊະລາ ແທັບ ເບັນສັນ ໄດ້ກ່າວວ່າ ຜູ້ສອນສາດສະໜາ "ຕ້ອງສະແດງວິທີທີ່ [ພະຄຳພີມໍມອນ] ໄດ້ຕອບຄຳຖາມທີ່ຍິ່ງໃຫຍ່ຂອງຈິດວິນຍານແນວໃດ" ("Flooding the Earth with the Book of Mormon," *Ensign*, Nov. 1988, 5).

"ຄຳຖາມອັນຍິ່ງໃຫຍ່ຂອງຈິດວິນຍານ" ອາດຈະເປັນຄຳຖາມດັ່ງເຊັ່ນ: ພະເຈົ້າມີແທ້ບໍ? ເຮົາໄດ້ມີຊີວິດຢູ່ກ່ອນເຮົາມາເກີດບໍ? ເຮົາຈະມີຊີວິດຫລັງຈາກເຮົາຕາຍໄປບໍ? ຈຸດປະສົງຂອງຊີວິດແມ່ນຫຍັງ? ພະເຢຊູຄືພະຜູ້ຊ່ອຍໃຫ້ລອດແທ້ບໍ?



ຄຳຖາມອື່ນອາດຈະເຈາະຈົງຢູ່ທີ່ຄວາມຕ້ອງການທາງໂລກຫລາຍກວ່າ ເຊັ່ນ: ເຮົາຈະປັບປຸງຄວາມສຳພັນນຳຜົວ ຫລື ເມຍຂອງເຮົາແນວໃດ? ເຮົາຈະສາມາດຊ່ອຍເຫລືອລູກໄວລຸ້ນຂອງເຮົາໃຫ້ຫລີກລ້ຽງຢາທີ່ຕິດແສດ ຫລື ຄວາມອະທຳໄດ້ແນວໃດ? ເຮົາຈະສາມາດຊອກຫາວຽກງານເພື່ອລ້ຽງດູຄອບຄົວຂອງເຮົາໄດ້ແນວໃດ?

ພະກິດຕິຄຸນຂອງພະເຢຊູຄິດຊ່ອຍເຫລືອເຮົາໃຫ້ຕອບຄຳຖາມທັງສອງຢ່າງນີ້. ເມື່ອເຮົາມີສັດທາເພີ່ມຂຶ້ນວ່າ ພະຄຳພີມໍມອນແມ່ນຄວາມຈິງ, ເຮົາຈະສາມາດເລີ່ມຕອບຄຳຖາມກ່ຽວກັບຈຸດປະສົງຂອງຊີວິດ ແລະ ຄວາມຫວັງໃນຊີວິດນິລັນດອນ. ພະຄຳພີມໍມອນໄດ້ບັນລະຍາຍເຖິງແຜນແຫ່ງຄວາມສຸກເຊິ່ງເຮັດໃຫ້ຊີວິດມີທັດສະນະ ແລະ ຄວາມໝາຍ. ພະຄຳພີມໍມອນໄດ້ສອນຢ່າງແຈ່ມແຈ້ງກ່ຽວກັບການຕອບຄຳຖາມດັ່ງຕໍ່ໄປນີ້.

- ມີພະເຈົ້າຫລືບໍ່? (Alma 22)
- ພະເຢຊູຄິດຄາດຫວັງຫຍັງແດ່ຈາກເຮົາ? (2 ນີໄຟ 9)
- ຄວາມເຊື່ອໃນພະເຢຊູຄິດສາມາດຊ່ອຍເຮົາໄດ້ແນວໃດ? (Alma 36)
- ມີຊີວິດຫລັງຈາກຄວາມຕາຍບໍ? (ແອລະມາ 40)
- ຈຸດປະສົງຂອງຊີວິດແມ່ນຫຍັງ? (ແອລະມາ 34)
- ເປັນຫຍັງພະເຈົ້າຈຶ່ງຍອມໃຫ້ຄວາມຊົ່ວ ແລະ ຄວາມທຸກທໍລະມານເກີດຂຶ້ນ? (2 ນີໄຟ 2; Alma 14:9–11; 60:13)
- ລູກນ້ອຍຂອງເຮົາຕ້ອງຮັບບັບຕິດສະມາບໍ? (ໂມໂລໄນ 8)
- ພະເຈົ້າຮູ້ຈັກເຮົາບໍ? (ແອລະມາ 5:38, 58)
- ພະເຈົ້າຕອບຄຳອະທິຖານບໍ? (ອີນັດ 1)

ໝາຍເຫດ

- ເຮົາຈະພົບຄວາມສະຫງົບ ແລະ ຄວາມປິຕິຍິນດີໄດ້ແນວໃດ? (ໂມໄຊຢາ 2, 4)
- ຄອບຄົວເຮົາຈະໄດ້ຮັບຄວາມສຸກ ແລະ ຄວາມເປັນໜຶ່ງຫລາຍຂຶ້ນໄດ້ແນວໃດ? (ໂມໄຊຢາ 2)
- ເຮົາຈະເຮັດໃຫ້ຄອບຄົວເຮົາ ແລະ ອາຊີບຂອງເຮົາສຳຄັນເທົ່າໆກັນໄດ້ແນວໃດ? (3 ນີໄຟ 13)
- ເຮົາຈະສາມາດເຮັດໃຫ້ຄວາມສຳພັນຜົວເມຍຂອງເຮົາເຂັ້ມແຂງຂຶ້ນໄດ້ແນວໃດ? (3 ນີໄຟ 14)
- ເຮົາຈະສາມາດຫລີກລ້ຽງຈາກຄວາມຊົ່ວທີ່ຊຶມຊູ່ຄອບຄົວຂອງເຮົາໄດ້ແນວໃດ? (ແອລະມາ 39)
- ເຮົາຈະສາມາດຫລີກລ້ຽງຈາກບາບໄດ້ແນວໃດ? (Helaman 5)

ເມື່ອເຮົາອ່ານພະຄຳພີມໍມອນດ້ວຍການນຳພາຈາກພະວິນຍານ, ມັນຈະຊ່ອຍເຫລືອເຮົາຕອບຄຳຖາມສ່ວນຕົວ. ມັນສອນວ່າ ການອະທິຖານ ແລະ ການເປີດເຜີຍເປັນສິ່ງສຳຄັນເພື່ອແກ້ໄຂບັນຫາ. ມັນຊ່ອຍເຫລືອເຮົາໃຫ້ມີສັດທາວ່າ ພະເຈົ້າຈະຕອບຄຳອະທິຖານຂອງເຮົາ.

ພະຄຳພີມໍມອນຍັງໄດ້ຊ່ອຍເຫລືອເຮົາໃຫ້ເຂົ້າໃຈວ່າ ພະບັນຍັດຂອງພະເຈົ້າບໍ່ແມ່ນການຈຳກັດໃຫ້ເຮັດ ຫລື ບໍ່ເຮັດ, ແຕ່ເປັນສິ່ງນຳພາສູ່ຊີວິດທີ່ມີຄວາມສຸກຢ່າງອຸດົມສົມບູນ. ເມື່ອເຮົາເລີ່ມເຂົ້າໃຈວ່າ ຫລັກທຳ ແລະ ພິທີການເບື້ອງຕົ້ນຂອງພະກິດຕິຄຸນແມ່ນວິທີທີ່ຈະມີຊີວິດທີ່ອຸດົມສົມບູນ, ເຮົາຈະເຫັນຄຸນຄ່າວ່າຫລັກທຳເຫລົ່ານີ້ ຊ່ອຍຕອບຄຳຖາມຕ່າງໆ ແລະ ເຮັດໃຫ້ຄວາມຕ້ອງການຕ່າງໆສົມບູນ. ຕົວຢ່າງເຊັ່ນ ເຮົາເຂົ້າໃຈວ່າການກັບໃຈ, ການໃຫ້ອະໄພ, ແລະ ພັນທະສັນຍາ ທີ່ຈະຮັບໃຊ້ຄົນອື່ນໆແມ່ນສິ່ງສຳຄັນໃນການປັບປຸງຄວາມສຳພັນນຳຜົວ ຫລື ເມຍຂອງເຮົາ. ເຮົາເຫັນວ່າການມີສັດທາໃນພະຄິດ, ການຍອມຮັບ ແລະ ການຮັກສາພັນທະສັນຍາ, ແລະ ເຮັດຕາມການກະຕຸ້ນຂອງພະວິນຍານ, ສາມາດຊ່ອຍເຫລືອຊາວໜຸ່ມໃຫ້ຫລີກລ້ຽງຈາກການລໍ້ລວງ ເຊິ່ງມີອຳນາດ ທີ່ອ້ອມລ້ອມເຂົາເຈົ້າ.

> *"ໃນໂລກທີ່ມີແຕ່ອັນຕະລາຍຫລາຍຂຶ້ນ . . . ພະຄຳພີມໍມອນ: ປະຈັກພະຍານອີກຢ່າງໜຶ່ງເຖິງພະເຢຊູຄິດ ມີອຳນາດການລ້ຽງດູເພື່ອປິ່ນປົວຈິດວິນຍານທີ່ຫິວໂຫຍຂອງໂລກ."*
>
> – ປະທານ ບອຍ ເຄ ແພັກເກີ
>
> "THE BOOK OF MORMON: ANOTHER TESTAMENT OF JESUS CHRIST," *ENSIGN*, NOV. 2001, 64

ພະກິດຕິຄຸນສາມາດແກ້ໄຂເກືອບທຸກຄຳຖາມ ຫລື ຄວາມຕ້ອງການຕ່າງໆ. ນີ້ຄືເຫດຜົນທີ່ທ່ານຕ້ອງ "ສອນຫລັກທຳພະກິດຕິຄຸນຂອງເຮົາ, ເຊິ່ງມີຢູ່ໃນພະຄຳພີໄບເບິ້ນ ແລະ ພະຄຳພີມໍມອນ, ເຊິ່ງໃນນັ້ນມີຄວາມສົມບູນຂອງພະກິດຕິຄຸນ" (see D&C 42:12).

**ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ**

ຂຽນ "ຄຳຖາມອັນຍິ່ງໃຫຍ່ຂອງຈິດວິນຍານ" ທີ່ຜູ້ສົນໃຈໄດ້ຖາມ. ຊອກຫາຂໍ້ພະຄຳພີໃນພະຄຳພີມໍມອນເພື່ອຕອບຄຳຖາມເຫລົ່ານີ້. ຂຽນຄຳຕອບໃນປຶ້ມບັນທຶກການສຶກສາຂອງທ່ານ, ແລະ ໃຊ້ຄຳຕອບເຫລົ່ານັ້ນເມື່ອທ່ານສອນ.

## ພະຄຳພີມໍມອນດຶງຜູ້ຄົນໃຫ້ເຂົ້າໃກ້ຊິດພະເຈົ້າຫລາຍຂຶ້ນ

ກ່ຽວກັບພະຄຳພີມໍມອນ, ສາດສະດາ ໂຈເຊັບ ສະມິດ ໄດ້ກ່າວວ່າ "ມະນຸດຈະເຂົ້າໃກ້ຊິດພະເຈົ້າຫລາຍຂຶ້ນ ໂດຍການເຊື່ອຟັງຫລັກທຳຂອງມັນ ຫລາຍກວ່າການເຊື່ອຟັງປຶ້ມອື່ນໆ" (ຄຳນຳຕໍ່ພະຄຳພີມໍມອນ). ພະຄຳພີມໍມອນເປັນສິ່ງທີ່ສະໜັບສະໜູນປະຈັກພະຍານ ແລະ ການເປີດເຜີຍສ່ວນຕົວ. ຈົ່ງໃຊ້ພະຄຳພີມໍມອນເພື່ອຊ່ອຍເຫລືອຜູ້ຄົນໃຫ້ມີປະສົບການທາງວິນຍານ, ໂດຍສະເພາະແລ້ວ ໃຫ້ມີປະຈັກພະຍານຈາກພະວິນຍານບໍລິສຸດວ່າ ພະຄຳພີມໍມອນແມ່ນຄວາມຈິງ. ໂດຍການເຊື້ອເຊີນຜູ້ຄົນໃຫ້ດຳລົງຊີວິດຕາມຫລັກທຳທີ່ມີໃນພະຄຳພີມໍມອນຢ່າງສະໝໍ່າສະເໝີ, ທ່ານຈະຊ່ອຍເຫລືອເຂົາເຈົ້າໃຫ້ພັດທະນາສັດທາໃນພະເຢຊູຄິດ ແລະ ເຂົ້າໃກ້ຊິດພະເຈົ້າຫລາຍຂຶ້ນ.

ປະທານ ກໍດອນ ບີ ຮິງລີ ໄດ້ປະກາດວ່າ: "ຜູ້ທີ່ໄດ້ອ່ານ [ພະຄຳພີມໍມອນ] ດ້ວຍການອະທິຖານ, ບໍ່ວ່າຈະຮັ່ງມີ ຫລື ທຸກຍາກ, ມີຄວາມຮູ້ ຫລື ຂາດການສຶກສາ, ຈະເຕີບໂຕພາຍໃຕ້ອຳນາດຂອງມັນ. . . . ປາດສະຈາກຄວາມສົງໄສ

ຂ້າພະເຈົ້າຂໍສັນຍາກັບທ່ານວ່າ ຖ້າທ່ານຈະອ່ານພະຄຳພີມໍມອນດ້ວຍການອະທິຖານ, ເຖິງແມ່ນວ່າທ່ານຈະເຄີຍອ່ານມັນມາກ່ອນແລ້ວຫລາຍໆເທື່ອກໍຕາມ, ພະວິນຍານຂອງພະຜູ້ເປັນເຈົ້າຈະມາສູ່ຈິດໃຈຂອງທ່ານ. ການຕັດສິນໃຈຢ່າງແນ່ວແນ່ທີ່ຈະເຊື່ອຟັງພະບັນຍັດຂອງພະອົງຈະເພີ່ມຂຶ້ນ ແລະ ປະຈັກພະຍານກ່ຽວກັບຄວາມຈິງຂອງພະບຸດຂອງພະເຈົ້າທີ່ມີພະຊົນຢູ່ຈະເຂັ້ມແຂງຂຶ້ນ" ("The Power of the Book of Mormon," *Ensign*, June 1988, 6).

## ໃຊ້ພະຄຳພີມໍມອນໃນການຕອບໂຕ້ການຂັດຄ້ານ

ຫລາຍໆຄົນຈະບໍ່ເຊື່ອສິ່ງທັງໝົດທີ່ທ່ານສອນ. ປະທານ ເອສະລາ ແທັບ ເບັນສັນ ໄດ້ສອນວິທີທີ່ພະຄຳພີມໍມອນສາມາດເປັນແຫລ່ງສຳຄັນໃນການຕອບໂຕ້ຕໍ່ສະພາບການເຫລົ່ານັ້ນ:

"ເຮົາຕ້ອງໃຊ້ພະຄຳພີມໍມອນໃນການແກ້ໄຂການຂັດຄ້ານຕໍ່ສາດສະໜາຈັກ. . . ."

". . . ການຂັດຄ້ານ, ເຊິ່ງກ່ຽວກັບເລື່ອງການເອົາລູກອອກ, ການແຕ່ງງານນຳຫລາຍຄົນພ້ອມກັນ, ການນະມັດສະການໃນວັນທີເຈັດ, ແລະ ອື່ນໆ, ວ່າ ໂຢເຊັບ ສະມິດ ແລະ ຜູ້ດຳລົງຕຳແໜ່ງຕໍ່ຈາກເພິ່ນ ໄດ້ເປັນສາດສະດາທີ່ໄດ້ຮັບການເປີດເຜີຍທີ່ສັກສິດຈາກພະເຈົ້າຫລືບໍ່. . . .

". . . ບັນຫາດຽວທີ່ຜູ້ຂັດຄ້ານຕ້ອງແກ້ໄຂເພື່ອຕົວເອງແມ່ນວ່າ ພະຄຳພີມໍມອນແມ່ນຄວາມຈິງຫລືບໍ່. ຖ້າພະຄຳພີມໍມອນແມ່ນຄວາມຈິງ, ແລ້ວພະເຢຊູກໍຄື ພະຄິດ, ໂຢເຊັບ ສະມິດ ໄດ້ເປັນສາດສະດາຂອງພະອົງ, ສາດສະໜາຈັກຂອງພະເຢຊູຄິດແຫ່ງສິດທິຊົນຍຸກສຸດທ້າຍແມ່ນແທ້ຈິງ, ແລະ ໄດ້ຖືກນຳພາໃນສະໄໝນີ້ໂດຍສາດສະດາທີ່ໄດ້ຮັບການເປີດເຜີຍ.



*My Servant Joseph* © 2004 Liz Lemon Swindle. ຮູບນີ້ໄດ້ຖືກອະນຸຍາດໃຫ້ພີມໃຊ້ໂດຍ Foundation Arts, American Fork, Utah 84003.

"ວຽກງານທີ່ສຳຄັນຂອງເຮົາຄືການປະກາດພະກິດຕິຄຸນ ແລະ ປະກາດຢ່າງໃຫ້ໄດ້ຍິນ. ເຮົາບໍ່ມີຂໍ້ຜູກມັດທີ່ຈະຕອບໂຕ້ຕໍ່ທຸກໆການຂັດຄ້ານ. ໃນບັ້ນສຸດທ້າຍ ທຸກຄົນຈະສູ້ໜ້າກັບສັດທາຂອງເຂົາເອງ, ແລະ ໃນຕອນນັ້ນ ເຂົາຕ້ອງຢູ່ກັບທີ່ ບໍ່ຍອມຖອຍຕົວ" (*A Witness and a Warning*, 4–5).

ຕົວຢ່າງເຊັ່ນ, ຜູ້ສົນໃຈທີ່ຈິງໃຈອາດຂັດຄ້ານຕໍ່ສິ່ງທີ່ທ່ານໄດ້ສອນກ່ຽວກັບພະວາຈາແຫ່ງປັນຍາ. ຊ່ອຍເຂົາເຈົ້າໃຫ້ເຫັນວ່າຄຳຖາມອັນແທ້ຈິງແມ່ນ ໂຢເຊັບ ສະມິດ ໄດ້ກ່າວໃນຖານະເປັນສາດສະດາຂອງພະເຈົ້າຫລືບໍ່ ເມື່ອພະບັນຍັດນີ້ໄດ້ຖືກຕັ້ງຂຶ້ນໃນຍຸກສະໄໝນີ້. ທ່ານອາດຈະເວົ້າວ່າ: "ການມີສັດທາທີ່ຈະຍອມຮັບການສອນນີ້ ຈະຕ້ອງມີຄວາມໝັ້ນໃຈວ່າ ພະບັນຍັດນີ້ມາສູ່ເຮົາຜ່ານການເປີດເຜີຍຈາກພະເຈົ້າຕໍ່ສາດສະດາ ໂຢເຊັບ ສະມິດ. ວິທີທີ່ຈະຮູ້ວ່າ ໂຢເຊັບ ສະມິດ ເປັນສາດສະດາຂອງພະເຈົ້າຄື ການອ່ານ ແລະ ການອະທິຖານກ່ຽວກັບພະຄຳພີມໍມອນ."

ຜູ້ສົນໃຈຕ້ອງແກ້ໄຂບັນຫາຕ່າງໆ ແລະ ການຂັດຄ້ານຂອງເຂົາເຈົ້າດ້ວຍຕົວເອງ. ທ່ານສາມາດຊ່ອຍເຫລືອເມື່ອທ່ານເຮັດໃຫ້ເຂົາເຈົ້າຕັ້ງໃຈໃສ່ຕໍ່ສິ່ງທີ່ຈະເຮັດໃຫ້ສັດທາຂອງເຂົາເຈົ້າເຂັ້ມແຂງຂຶ້ນໃນພະເຢຊູຄິດ— ການອ່ານ ແລະ ການອະທິຖານກ່ຽວກັບພະຄຳພີມໍມອນ. ເມື່ອເຂົາເຈົ້າເຮັດໃຫ້ປະຈັກພະຍານຂອງເຂົາເຈົ້າ ເຂັ້ມແຂງຂຶ້ນກ່ຽວກັບການຟື້ນຟູ, ເຂົາເຈົ້າຈະມີພະລັງເພື່ອເອົາຊະນະການຂັດຄ້ານ ແລະ ບັນຫາຕ່າງໆຂອງເຂົາເຈົ້າ.

ເມື່ອທ່ານແກ້ໄຂຄວາມເປັນຫ່ວງ, ຈົ່ງຈື່ຈຳວ່າຄວາມເຂົ້າໃຈຂອງພວກເຮົາມາຈາກສາດສະດາໃນສະໄໝໃໝ່— ເຊິ່ງແມ່ນ ໂຢເຊັບ ສະມິດ ແລະ ຜູ້ດຳລົງຕຳແໜ່ງຕໍ່ຈາກເພິ່ນ—ຜູ້ທີ່ຮັບການເປີດເຜີຍໂດຍກົງຈາກພະເຈົ້າ. ເພາະສະນັ້ນ, ຄຳຖາມທຳອິດສຳລັບຜູ້ສົນໃຈທີ່ຈະຕອບຄື ໂຢເຊັບ ສະມິດ ເປັນສາດສະດາຫລືບໍ່, ແລະ ເຂົາສາມາດຕອບຄຳຖາມນີ້ໂດຍການອ່ານ ແລະ ການອະທິຖານກ່ຽວກັບພະຄຳພີມໍມອນ.

### ໂຢເຊັບ ສະມິດ ແລະ ພະຄຳພີມໍມອນ

ການອ່ານ ແລະ ການອະທິຖານກ່ຽວກັບພະຄຳພີມໍມອນຄືວິທີໜຶ່ງທີ່ຈະຮູ້ວ່າ ໂຢເຊັບ ສະມິດ ເປັນສາດສະດາຂອງພະເຈົ້າ.

ໝາຍເຫດ

ໝາຍເຫດ

### ກິດຈະກຳ: ການສຶກສາສ່ວນຕົວ

ໃນປຶ້ມບັນທຶກການສຶກສາຂອງທ່ານ, ໃຫ້ຂຽນວິທີທີ່ທ່ານຈະອ້າງອີງເຖິງ ໂຢເຊັບ ສະມິດ ແລະ ພະຄຳພີມໍມອນ ເພື່ອຕອບໂຕ້ການຂັດຄ້ານ ຫລື ບັນຫາຕ່າງໆດັ່ງຕໍ່ໄປນີ້:

- "ຂ້ອຍບໍ່ເຊື່ອວ່າພະເຈົ້າກ່າວຕໍ່ຜູ້ຄົນໃນປະຈຸບັນນີ້."
- "ຂ້ອຍເຊື່ອວ່າ ຂ້ອຍສາມາດນະມັດສະການພະເຈົ້າຕາມວິທີທາງຂອງຂ້ອຍເອງ ບໍ່ແມ່ນຜ່ານກຸ່ມສາດສະໜາໃດໆ."
- "ເປັນຫຍັງຂ້ອຍຕ້ອງເຊົາດື່ມເຫລົ້າແວງຕອນກິນເຂົ້າຖ້າຂ້ອຍເຂົ້າຮ່ວມສາດສະໜາຈັກຂອງພວກເຈົ້າ?"
- "ເປັນຫຍັງຂ້ອຍຕ້ອງການສາດສະໜາ?"

## ທ່ານຄວນຈະໃຊ້ພະຄຳພີມໍມອນແນວໃດ?

ຜູ້ສົນໃຈຫລາຍຄົນບໍ່ອ່ານພະຄຳພີມໍມອນ ຫລື ບໍ່ເຂົ້າໃຈສິ່ງທີ່ເຂົາເຈົ້າອ່ານ. ຜູ້ທີ່ບໍ່ອ່ານ ຫລື ບໍ່ເຂົ້າໃຈ ພະຄຳພີມໍມອນ ຈະມີຄວາມຫຍຸ້ງຍາກໃນການຮັບປະຈັກພະຍານວ່າມັນແມ່ນຄວາມຈິງ.

### ອ່ານພະຄຳພີມໍມອນນຳຜູ້ສົນໃຈຂອງທ່ານ

ເມື່ອອ່ານນຳກັນ, ໃຫ້ອະທິຖານຂໍໃຫ້ພະວິນຍານບໍລິສຸດເປັນພະຍານຕໍ່ຜູ້ສົນໃຈວ່າ ພະຄຳພີມໍມອນແມ່ນຄວາມຈິງ.



ທ່ານສາມາດຊ່ອຍຜູ້ສົນໃຈໂດຍການອ່ານພະຄຳພີມໍມອນຮ່ວມນຳເຂົາເຈົ້າ. ໃຫ້ອະທິຖານເພື່ອຄວາມຊ່ອຍເຫລືອເມື່ອທ່ານເລືອກຂໍ້ພະຄຳພີທີ່ຕອບຄວາມຂ້ອງໃຈ ແລະ ບັນຫາຕ່າງໆຂອງເຂົາເຈົ້າ. ທ່ານສາມາດອ່ານນຳເຂົາເຈົ້າເປັນສ່ວນໜຶ່ງຂອງບົດຮຽນ ຫລື ລະຫວ່າງການຢ້ຽມຢາມຄັ້ງຕໍ່ໄປ. ທ່ານສາມາດມອບໝາຍໃຫ້ສະມາຊິກອ່ານນຳຜູ້ສົນໃຈໄດ້ຄືກັນ.

ຂໍ້ພະຄຳພີທີ່ສຳຄັນບາງຂໍ້ ແມ່ນຮ່ວມດ້ວຍ ໜ້າຫົວຂໍ້, ຄຳນຳ (ໂດຍສະເພາະ ສອງວັກສຸກທ້າຍ), ແລະ ໂມໂລໄນ 10:3–5. ຂໍ້ພະຄຳພີເຫລົ່ານີ້ຊ່ອຍເຫລືອຜູ້ສົນໃຈໃຫ້ເຂົ້າໃຈ ວິທີທີ່ຈະໄດ້ຮັບປະຈັກພະຍານກ່ຽວກັບພະຄຳພີມໍມອນ. ຊຸກຍູ້ເຂົາເຈົ້າໃຫ້ອ່ານພະຄຳພີມໍມອນເລີ່ມແຕ່ຕົ້ນ, ຮ່ວມດ້ວຍປະຈັກພະຍານຂອງພະຍານສາມຄົນ ແລະ ພະຍານແປດຄົນ ແລະ ປະຈັກພະຍານຂອງສາດສະດາ ໂຢເຊັບ ສະມິດ.

ອ່ານ ແລະ ສົນທະນາຂໍ້ພະຄຳພີ (ດັ່ງເຊັ່ນ 1 ນີໄຟ 3:7 ຫລື ໂມໄຊຢາ 2:17) ແລະ ຂໍ້ພະຄຳພີທີ່ຍາວກວ່າ ຫລື ອ່ານໝົດບົດ (ດັ່ງເຊັ່ນ 2 ນີໄຟ 31, Alma 7, ຫລື 3 ນີໄຟ 18).

ເມື່ອທ່ານອ່ານນຳຜູ້ສົນໃຈ, ໃຫ້ຢຸດອ່ານບາງຄັ້ງບາງຄາວ ແລະ ສົນທະນາສິ່ງທີ່ທ່ານໄດ້ອ່ານ. ຊີ້ໃຫ້ເຫັນຂ່າວສານທີ່ສຳຄັນ ຫລື ຄຳສອນທີ່ສຳຄັນທີ່ຕ້ອງຊອກຫາເມື່ອທ່ານອ່ານນຳເຂົາເຈົ້າ. ແບ່ງປັນຄວາມເຂົ້າໃຈ, ຄວາມຮູ້ສຶກ, ປະຈັກພະຍານ, ແລະ ປະສົບການສ່ວນຕົວທີ່ເໝາະສົມ. ຊ່ອຍເຫລືອຄົນອື່ນໆໃຫ້ຮູ້ສຶກເຖິງອຳນາດທາງວິນຍານຂອງພະຄຳພີມໍມອນ. ໃນວິທີນີ້ທ່ານຈະສາມາດສອນເຂົາເຈົ້າເຖິງຄຳສອນອັນແທ້ຈິງຈາກພະຄຳພີມໍມອນໂດຍກົງ. ເຮັດວິທີນີ້ຕໍ່ໄປຕອນທ່ານໄປຢ້ຽມຢາມອີກ ເພື່ອຄົນທີ່ທ່ານສອນຈະສາມາດພັດທະນາຄວາມສາມາດທີ່ຈະອ່ານ ແລະ ອະທິຖານດ້ວຍຕົວເອງ.

ໝາຍເຫດ

ສອນຫລັກທຳ ແລະ ຄຳສອນໂດຍໃຊ້ຄຳເວົ້າ ແລະ ຖ້ອຍຄຳຂອງສາດສະດາໃນພະຄຳພີມໍມອນ. ໃຫ້ອະທິບາຍພື້ນຖານ ແລະ ຄວາມໝາຍຂອງຂໍ້ພະຄຳພີ. ອະທິບາຍຄຳສັບ ແລະ ປະໂຫຍກສັ້ນທີ່ຜູ້ສົນໃຈບໍ່ຮູ້ຈັກ.

"ປຽບທຽບ" ສິ່ງທີ່ທ່ານໄດ້ອ່ານກັບຕົວທ່ານເອງ ແລະ ກັບຜູ້ສົນໃຈຂອງທ່ານ ໂດຍການຊອກຫາການໃຊ້ທີ່ກ່ຽວພັນກັບທ່ານເປັນສ່ວນຕົວ ແລະ ກັບຜູ້ສົນໃຈຂອງທ່ານ (see 1 Nephi 19:23). ການ "ປຽບທຽບ" ເປັນການສ້າງຄວາມຜູກພັນລະຫວ່າງການເຂົ້າໃຈຄຳສອນ ແລະ ການດຳລົງຊີວິດຕາມຄຳສອນ. ເພື່ອຈະອ່ານຢ່າງຈິງໃຈ, ດ້ວຍເຈດຕະນາທີ່ແທ້ຈິງ, ທ່ານ ແລະ ຜູ້ທີ່ທ່ານສອນຕ້ອງເຕັມໃຈທີ່ຈະເຮັດຕາມຄຳສອນ, ເຮັດໃຫ້ມັນຮ່ວມຢູ່ໃນຊີວິດປະຈຳວັນຂອງພວກທ່ານ, ແລະ ຖ້າຈຳເປັນ ໃຫ້ກັບໃຈ. ໂດຍການດຳລົງຊີວິດຕາມຄຳສອນ, ທ່ານຈະໄດ້ຮັບຄວາມໝັ້ນໃຈວ່າ ມັນແມ່ນຄວາມຈິງ. ຕົວຢ່າງ, ທ່ານອາດຈະເວົ້າກັບຜູ້ສົນໃຈວ່າ:

> *"ຢ່າປະລະພະຄຳພີມໍມອນ. ໃຫ້ອະທິຖານເພື່ອຈະໄດ້ຮູ້ວິທີທີ່ທ່ານຈະໃຊ້ພະຄຳພີມໍມອນ ໃຫ້ໄດ້ຜົນຂຶ້ນໃນການເຜີຍແຜ່ຂອງທ່ານ. ຂ້າພະເຈົ້າສັນຍາກັບທ່ານວ່າ ເມື່ອທ່ານເຮັດແບບນີ້, ສະໝອງຂອງທ່ານຈະຮັບເອົາຄວາມສະຫວ່າງພ້ອມດ້ວຍການຊີ້ນຳວ່າ ທ່ານຄວນເຮັດແນວໃດ."*
>
> – ແອວເດີ ໂຢເຊັບ ບີ ເວີດລິນ
>
> SEMINAR FOR NEW MISSION PRESIDENTS, 23 JUNE 1999

- "ຄືກັນກັບທ່ານ, ນີໄຟໄດ້ປະເຊີນໜ້າກັບການທ້າທາຍທີ່ຫຍຸ້ງຍາກ. ແຕ່ວ່າເມື່ອເພິ່ນໃຊ້ສັດທາເພື່ອຈະ 'ໄປ ແລະ ເຮັດ' ສິ່ງທີ່ພະຜູ້ເປັນເຈົ້າໄດ້ບັນຊາເພິ່ນ, ເພິ່ນສາມາດເຮັດໃຫ້ສຳເລັດ. (ອ່ານ 1 ນີໄຟ 3:7.) ເຮົາຮູ້ວ່າ ພະເຈົ້າຈະຕຽມຫົນທາງໄວ້ໃຫ້ທ່ານ ເພື່ອຈະໄດ້ດຳລົງຊີວິດຕາມພະວາຈາແຫ່ງປັນຍາ."
- "ຈອນ, ມັນເປັນສິ່ງທີ່ດີທີ່ທ່ານຢາກເປັນອິດສະລະຈາກຄວາມຮູ້ສຶກວ່າຕົວເອງຜິດ. ຄືກັນກັບພະຜູ້ຊ່ອຍໃຫ້ລອດໄດ້ສັນຍາກັບຊາວນີໄຟ, ຖ້າທ່ານກັບໃຈ, ຮັບບັບຕິດສະມາ, ແລະ ຮັບພະວິນຍານບໍລິສຸດ, ທ່ານຈະ 'ບໍ່ມີຄວາມຜິດຕໍ່ພະພັກຂອງພະບິດາ'" (ອ່ານ 3 ນີໄຟ 27:16.)

ໃຫ້ໄວ້ວາງໃຈຕໍ່ຄຳສັນຍາທີ່ມີຢູ່ໃນ ໂມໂລໄນ 10:3–5. ທຸກຄົນທີ່ອ່ານ ແລະ ອະທິຖານຢ່າງຈິງໃຈກ່ຽວກັບພະຄຳພີນີ້ຈະສາມາດຮູ້ດ້ວຍຄວາມແນ່ນອນກ່ຽວກັບຄວາມຈິງຂອງມັນ ໂດຍອຳນາດຂອງພະວິນຍານບໍລິສຸດ. ຈົ່ງເຮັດທຸກສິ່ງທຸກຢ່າງທີ່ທ່ານສາມາດເຮັດໄດ້ ເພື່ອຊ່ອຍເຫລືອໃຫ້ຜູ້ສົນໃຈ:

- ອ່ານພະຄຳພີມໍມອນ ແລະ ໄຕ່ຕອງຂ່າວສານຂອງມັນກ່ຽວກັບພະເຢຊູຄຣິດ.
- ອະທິຖານຕໍ່ພະເຈົ້າດ້ວຍສັດທາໃນພະເຢຊູຄຣິດເພື່ອຈະໄດ້ຮັບປະຈັກພະຍານວ່າ ພະຄຳພີມໍມອນແມ່ນຄວາມຈິງ ແລະ ວ່າ ໂຢເຊັບ ສະມິດ ເປັນສາດສະດາຂອງການຟື້ນຟູ.
- ອະທິຖານຢ່າງຈິງໃຈ ແລະ ມີເຈດຕະນາທີ່ແທ້ຈິງ, ເຊິ່ງໝາຍຄວາມວ່າ ເຂົາເຈົ້າຈະຕັ້ງໃຈທີ່ຈະເຮັດຕາມຄຳຕອບທີ່ເຂົາເຈົ້າໄດ້ຮັບຈາກພະເຈົ້າ.

ທ່ານຕ້ອງໃຊ້ຄຳສັນຍານີ້ເປັນປະຈຳຄືກັນ ເພື່ອຈະເຮັດໃຫ້ປະຈັກພະຍານຂອງທ່ານກ່ຽວກັບພະຄຳພີມໍມອນເຂັ້ມແຂງຂຶ້ນ ແລະ ຕໍ່ໃໝ່. ປະຈັກພະຍານທີ່ຕໍ່ໃໝ່ນີ້ຈະຊ່ອຍເຫລືອທ່ານໃຫ້ຮັກສາຄວາມໝັ້ນໃຈທີ່ໜັກແໜ້ນວ່າ ຜູ້ໃດກໍຕາມທີ່ນຳໃຊ້ຄຳສັນຍານີ້ ຈະໄດ້ຮັບຄຳຕອບ.

### ໃຊ້ພະຄຳພີມໍມອນໃນທຸກພາກສ່ວນຂອງວຽກງານຂອງທ່ານ

ພະຄຳພີມໍມອນຄືແຫລ່ງທີ່ມີອຳນາດໃນການປ່ຽນແປງ. ໃຫ້ໃຊ້ມັນເປັນແຫລ່ງຕົ້ນຕໍທີ່ສຳຄັນສຳລັບການສອນຄວາມຈິງທີ່ໄດ້ຖືກຟື້ນຟູຄືນມາໃໝ່.

ໝາຍເຫດ

## ໃຫ້ຈື່ຈຳສິ່ງນີ້:

- ພະຄຳພີມໍມອນເປັນຫີນສຳຄັນຂອງປະຈັກພະຍານກ່ຽວກັບພະຄິດ, ຄຳສອນຂອງເຮົາ ແລະ ປະຈັກພະຍານຂອງເຮົາ.
- ພະຄຳພີມໍມອນໄດ້ສອນຄຳສອນທີ່ມີຢູ່ໃນບົດຮຽນຂອງຜູ້ສອນສາດສະໜາຢ່າງແຈ່ມແຈ້ງ.
- ໃຊ້ພະຄຳພີມໍມອນເພື່ອຕອບຄຳຖາມຂອງຈິດວິນຍານ ແລະ ຕອບໂຕ້ການຂັດຄ້ານກ່ຽວກັບສາດສະໜາຈັກ.
- ອ່ານພະຄຳພີມໍມອນນຳຜູ້ສົນໃຈ ແລະ ຜູ້ປ່ຽນໃຈເຫລື້ອມໃສໃໝ່ຂອງທ່ານຢ່າງສະໝ່ຳສະເໝີ. ເຮັດທຸກສິ່ງທຸກຢ່າງທີ່ທ່ານສາມາດເຮັດໄດ້ ເພື່ອຊ່ວຍເຂົາເຈົ້າໃຫ້ອ່ານດ້ວຍຕົວເອງ ແລະ ນຳໃຊ້ສິ່ງທີ່ເຂົາເຈົ້າໄດ້ຮຽນມາໃນຊີວິດຂອງເຂົາເຈົ້າ.
- ຈົ່ງໄວ້ວາງໃຈໃນຄຳສັນຍາຂອງພະຜູ້ເປັນເຈົ້າທີ່ວ່າ ທຸກໆຄົນທີ່ອ່ານ ແລະ ອະທິຖານຢ່າງຈິງໃຈກ່ຽວກັບພະຄຳພີມໍມອນ ຈະຮູ້ຄວາມຈິງຂອງມັນ ໂດຍອຳນາດຂອງພະວິນຍານບໍລິສຸດ.

## ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

ໝາຍເຫດ

### ການສຶກສາສ່ວນຕົວ

- ອ່ານ 2 ນີໄຟ 2, 9; 2 Nephi 30; 2 ນີໄຟ 31, 32, ແລະ ໝາຍທຸກໆຂໍ້ອ້າງອີງກ່ຽວກັບ ພະເຍຊູຄຣິດ. ໃຫ້ຂຽນຊື່ ແລະ ຕຳແໜ່ງຂອງພະຄຣິດທີ່ໄດ້ໃຊ້ໃນບົດເຫລົ່ານີ້. ໃຫ້ຂີດເສັ້ນໃສ່ກ້ອງຄຳວ່າ ພະຄຣິດ. ໝາຍສີໃສ່ຄຸນສົມບັດຂອງພະອົງ ແລະ ການກະທຳຂອງພະອົງ. ທ່ານຄວນເຮັດສິ່ງນີ້ຕໍ່ໄປ ເມື່ອທ່ານອ່ານພະຄຳພີມໍມອນໝົດເຫລັ້ມ.

- ໃນປຶ້ມບັນທຶກການສຶກສາຂອງທ່ານ ໃຫ້ຂຽນກ່ຽວກັບຄວາມຮູ້ສຶກຂອງທ່ານຕອນທ່ານໄດ້ຮັບປະຈັກພະຍານທາງວິນຍານຄັ້ງທຳອິດວ່າ ພະຄຳພີມໍມອນແມ່ນຄວາມຈິງ.

- D&C 20:17 ໃຊ້ຄຳ "ໂດຍສິ່ງເຫລົ່ານີ້ພວກເຮົາຮູ້" ເພື່ອແນະນຳຄຳສອນທີ່ໄດ້ສອນ ແລະ ເຮັດໃຫ້ແຈ່ມແຈ້ງໂດຍພະຄຳພີມໍມອນ. ອ່ານ D&C 20:15–35 ແລະ ເຮັດລາຍການກ່ຽວກັບຄຳສອນທີ່ໄດ້ຖືກກ່າວເຖິງ. ເລືອກ ໜຶ່ງໃນຄຳສອນເຫລົ່ານີ້ ແລະ ໃຊ້ Guide to the Scriptures ເພື່ອປຽບທຽບລາຍການຂອງທ່ານກັບສິ່ງທີ່ພະຄຳພີໄບເບິ້ນໄດ້ສອນກ່ຽວກັບຄຳສອນເຫລົ່ານີ້.

- ປຽບທຽບຄຳເທດສະໜາທີ່ຈ້າຍພູ ທີ່ມີຢູ່ໃນ ມັດທາຍ 5–7 ແລະ ຄຳເທດສະໜາຂອງພະຄຣິດທີ່ພະວິຫານໃນ 3 ນີໄຟ 12–14. ເຮັດລາຍການຂອງເລື່ອງຈິງທີ່ແຈ່ມແຈ້ງ ແລະ ລ້ຳຄ່າ ທີ່ໄດ້ຖືກຟື້ນຟູຄືນມາໃໝ່ ຜ່ານພະຄຳພີມໍມອນ.

- ເຮັດລາຍການຄຳຖາມທີ່ຜູ້ສົນໃຈໄດ້ຖາມທ່ານ. ຊອກຫາຂໍ້ພະຄຳພີຈາກພະຄຳພີມໍມອນທີ່ຕອບຄຳຖາມເຫລົ່ານັ້ນ, ແລະ ໃຊ້ຄຳຕອບເຫລົ່ານັ້ນຕາມຄວາມຕ້ອງການໃນການສອນປະຈຳວັນຂອງທ່ານ.

- ຊອກຫາຂໍ້ພະຄຳພີຈາກພະຄຳພີມໍມອນທີ່ໄດ້ປ່ຽນແປງຊີວິດຂອງທ່ານ. ບັນທຶກຄວາມຮູ້ສຶກກ່ຽວກັບຂໍ້ພະຄຳພີນີ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

- ຊອກຫາຕົວຢ່າງໃນພະຄຳພີມໍມອນບ່ອນທີ່ຄຳອະທິຖານຂອງຄົນໃດຄົນໜຶ່ງໄດ້ຖືກບັນທຶກໄວ້. ໃນປຶ້ມບັນທຶກການສຶກສາຂອງທ່ານ, ຂຽນຫລັກທີ່ຄ້າຍຄືກັນໃນຄຳອະທິຖານເຫລົ່ານີ້.

- ອ່ານ 2 ນີໄຟ 33:10–15 ແລະ ໂມໂລໄນ 10:27–29, 34. ທ່ານຈະບອກຫຍັງແດ່ໃຫ້ ນີໄຟ ແລະ ໂມໂລໄນຟັງໃນບ່ອນພິພາກສາ ກ່ຽວກັບວິທີທີ່ທ່ານໄດ້ໃຊ້ພະຄຳພີມໍມອນ? ຂຽນຄຳຕອບຂອງທ່ານ ແລະ ຕັ້ງເປົ້າໝາຍເພື່ອຈະເຮັດໃຫ້ດີຂຶ້ນ.

- ຈາກຫົວຂໍ້ບົດຂອງ Mosiah 11–16, ໃຫ້ຂຽນການສະຫລຸບກ່ຽວກັບສິ່ງທີ່ ອາບີນາໄດ ໄດ້ສອນ. ອ່ານບົດເຫລົ່ານີ້ ແລະ ຂະຫຍາຍການສະຫລຸບຂອງທ່ານ.

- ຈາກຫົວບົດຂອງ ໂມໄຊຢາ 2–5, ໃຫ້ຂຽນການສະຫລຸບກ່ຽວກັບສິ່ງທີ່ກະສັດ ເບັນຈາມິນໄດ້ສອນ. ອ່ານບົດເຫລົ່ານີ້ ແລະ ຂະຫຍາຍການສະຫລຸບຂອງທ່ານ.

- ເມື່ອທ່ານອ່ານຈາກພະຄຳພີມໍມອນທຸກໆວັນ, ໃຫ້ບັນທຶກຂໍ້ພະຄຳພີທີ່ປະທັບໃຈທ່ານຫລາຍທີ່ສຸດ. ໃນປຶ້ມບັນທຶກການສຶກສາຂອງທ່ານ ໃຫ້ຂຽນວິທີທີ່ທ່ານຈະນຳໃຊ້ສິ່ງເຫລົ່ານີ້ໃນຊີວິດຂອງທ່ານ.

ໝາຍເຫດ

## ການສຶກສາກັບຄູ່ສອນສາດສະໜາ

- ອ່ານຂໍ້ພະຄຳພີຈາກພະຄຳພີມໍມອນນຳກັນ. ແບ່ງປັນສິ່ງທີ່ທ່ານໄດ້ຮຽນ ແລະ ຮູ້ສຶກ. ໃຫ້ສະແດງປະຈັກພະຍານຕໍ່ກັນແລະກັນນຳອີກ.
- ທ່ານຢາກເປັນຄືກັນກັບສາດສະດາຄົນໃດ ຫລື ຜູ້ສອນສາດສະໜາຄົນໃດ ຈາກພະຄຳພີມໍມອນ? ເປັນຫຍັງ? ແບ່ງປັນຄຳຕອບກັບຄູ່ສອນສາດສະໜາຂອງທ່ານ.
- ອ່ານ Alma 26 ແລະ Alma 29 ນຳກັນ. ແບ່ງປັນຄວາມຮູ້ສຶກຂອງທ່ານກ່ຽວກັບການຮັບໃຊ້ຂອງທ່ານ ໃນຖານະເປັນຜູ້ສອນສາດສະໜາ. ຂຽນຄວາມຮູ້ສຶກໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.
- ອ່ານ Alma 37:9 ແລະ ສົນທະນາວ່າ ພະຄຳພີມີຄວາມສຳຄັນແນວໃດຕໍ່ ແອມັນ ແລະ ຜູ້ຮ່ວມສອນສາດສະໜາຂອງລາວ. ຊອກຫາຂໍ້ອ້າງອີງທີ່ບັນລະຍາຍວິທີທີ່ເຂົາເຈົ້າໃຊ້ພະຄຳພີ.
- ອ່ານ ແອລະມາ 11–12 ແລະ Alma 13–14 ນຳຄູ່ສອນສາດສະໜາຂອງທ່ານ, ໃຫ້ຜູ້ໜຶ່ງທຳທ່າ ເປັນ ແອລະມາ ຫລື ອະມິວເລັກ ແລະ ໃຫ້ຜູ້ໜຶ່ງທຳທ່າເປັນຜູ້ຖ້າຕິ. ສັງເກດເບິ່ງຜູ້ສອນສາດສະໜາເຫລົ່ານີ້ຕອບຄຳຖາມທີ່ຍາກແນວໃດ.
- ອ່ານເລື່ອງຈິງດັ່ງຕໍ່ໄປນີ້ ແລະ ສົນທະນາສິ່ງທີ່ທ່ານໄດ້ຮຽນມາກ່ຽວກັບຄວາມສຳຄັນ ແລະ ອຳນາດຂອງພະຄຳພີມໍມອນ (ຊື່ຂອງຄົນໃນເລື່ອງ ເປັນຊື່ໃນນາມ).

  "ເມື່ອພວກເຮົາເຊື້ອເຊີນຄອບຄົວ ສະໄນເດີ ໃຫ້ຮັບບັບຕິດສະມາ ແລະ ຮັບການຢືນຢັນ, ຊິດສະເຕີ ສະໄນເດີ ຕຽມພ້ອມແລ້ວ, ແຕ່ວ່າ ບະລາເດີ ສະໄນເດີ ໄດ້ເວົ້າວ່າ, 'ຢ່າຫວັງຫລາຍ, ແອວເດີ. ຂ້ອຍບໍ່ຮູ້ວ່າຂ້ອຍຈະສາມາດເຮັດສິ່ງນີ້ໄດ້ຫລືບໍ່!' ເຖິງແມ່ນວ່າ ບະລາເດີ ສະໄນເດີ ຍອມຮັບສິ່ງທີ່ພວກເຮົາໄດ້ສອນ ແລະ ເປັນຄົນໃຈດີ ແລະ ມີມິດຕະພາບ, ແຕ່ລາວເປັນຫ່ວງຫລາຍວ່າຍາດຕິພີ່ນ້ອງຂອງລາວຈະສະແດງອອກແນວໃດ ກັບການທີ່ລາວເຂົ້າຮ່ວມສາດສະໜາຈັກອື່ນ.

  "ຫລັງຈາກຫລາຍໆອາທິດທີ່ໄດ້ສັງເກດເບິ່ງການດີ້ນລົນຂອງ ບະລາເດີ ສະໄນເດີ, ຄູ່ສອນສາດສະໜາຂອງຂ້າພະເຈົ້າ ແລະ ຂ້າພະເຈົ້າ ຮູ້ສຶກປະທັບໃຈວ່າຕ້ອງອ່ານ 3 ນີໄຟ 11 ອີກຄັ້ງໜຶ່ງກັບຄອບຄົວສະໄນເດີ. ຂ້າພະເຈົ້າຈະບໍ່ລືມສິ່ງທີ່ເກີດຂຶ້ນໃນຄືນວັນນັ້ນ. ເມື່ອພວກເຮົາເປີດພະຄຳພີມໍມອນ, ຄູ່ສອນສາດສະໜາຂອງຂ້າພະເຈົ້າອະທິບາຍວ່າ, 'ຕາມທີ່ພວກທ່ານອາດຈະຈື່ຈຳ, ບົດນີ້ເຫລົ່າເລື່ອງການຢ້ຽມຢາມຂອງພະຜູ້ຊ່ອຍໃຫ້ລອດຕໍ່ຜູ້ຄົນໃນພະຄຳພີມໍມອນ. ບ່ອນນີ້ພວກເຮົາອ່ານກ່ຽວກັບຄວາມຮັກຂອງພະຜູ້ຊ່ອຍໃຫ້ລອດຕໍ່ຜູ້ຄົນເຫລົ່ານີ້ ແລະ ສິ່ງທີ່ພະອົງໄດ້ສອນໃຫ້ເຂົາເຈົ້າ.' ພວກເຮົາໄດ້ປ່ຽນຜຽນກັນອ່ານຂໍ້ໜຶ່ງຫລືສອງຂໍ້. ຫລັງຈາກອ່ານຜ່ານຂໍ້ທີ 5, ຄູ່ສອນສາດສະໜາຂອງຂ້າພະເຈົ້າໄດ້ຕັດຄວາມ ແລະ ເວົ້າວ່າ, 'ເຮົາຮູ້ສຶກປະທັບໃຈສະເໝີຕໍ່ການບັນລະຍາຍກ່ຽວກັບສຽງທີ່ເຂົາເຈົ້າໄດ້ຍິນ. ສຽງນັ້ນບໍ່ແສບຫູ, ມັນບໍ່ດັງ, ແລະ ເຖິງແມ່ນ ວ່າມັນເປັນສຽງນ້ອຍ, ມັນມີອຳນາດແຫລມຄົມຕໍ່ເຂົາເຈົ້າ. ສຽງນີ້ບໍ່ພຽງແຕ່ໄດ້ຍິນດ້ວຍຫູຂອງເຂົາເຈົ້າເທົ່ານັ້ນ, ແຕ່ມັນໄດ້ກ່າວຕໍ່ຈິດໃຈຂອງເຂົາເຈົ້ານຳອີກ.' ຂ້າພະເຈົ້າສັງເກດເບິ່ງບະລາເດີ ແລະ ຊິດສະເຕີ ສະໄນເດີ ໃນຂະນະທີ່ເຂົາເຈົ້າຟັງຄູ່ສອນສາດສະໜາຂອງຂ້າພະເຈົ້າຢ່າງຕັ້ງໃຈ.

ໝາຍເຫດ

> "ຫລັງຈາກສົນທະນາກ່ຽວກັບການອະທິຖານ ແລະ ການຟັງພະວິນຍານແລ້ວ, ບະລາເດີ ສະໄນເດີ ອ່ານຕໍ່ໄປວ່າ: 'ແລະ ຈົ່ງເບິ່ງ ຄັ້ງທີສາມເຂົາຈຶ່ງເຂົ້າໃຈສຽງທີ່ເຂົາໄດ້ຍິນ ແລະ ສຽງກ່າວກັບເຂົາວ່າ: ຈົ່ງເບິ່ງບຸດທີ່ຮັກຂອງເຮົາຜູ້ທີ່ເຮົາພໍໃຈຫລາຍຜູ້ທີ່ເຮົາແຜ່ບາລະມີນາມຂອງເຮົາ—ເຈົ້າຈົ່ງຟັງທ່ານ.' ບະລາເດີ ສະໄນເດີ ໄດ້ຢຸດບຶດໜຶ່ງ, ເບິ່ງພະຄຳພີມໍມອນຂອງລາວຢ່າງຕັ້ງໃຈ. ຫລັງຈາກນັ້ນ ລາວເບິ່ງຂ້າພະເຈົ້າ ແລະ ເວົ້າວ່າ, 'ພະບິດາເທິງສະຫວັນມີຄວາມພາກພູມໃຈຫລາຍຕໍ່ພະບຸດຂອງພະອົງ, ແມ່ນບໍ?' ຂ້າພະເຈົ້າຕອບວ່າ 'ແມ່ນແລ້ວ.' ບະລາເດີ ສະໄນເດີ ເບິ່ງພະຄຳພີອີກ ແລະ ເບິ່ງໜ້າທີ່ເປີດໄວ້ຄືກັນກັບວ່າ ລາວກຳລັງຄິດຢ່າງໜັກ. ໃນທີ່ສຸດ ລາວເວົ້າວ່າ, 'ຂ້ອຍຢາກໃຫ້ພະບິດາເທິງສະຫວັນມີຄວາມພາກພູມໃຈນຳຂ້ອຍຄືກັນ. ຂ້ອຍຢາກຮູ້ວ່າພະອົງຈະແນະນຳຂ້ອຍແນວໃດ. ຂ້ອຍຄິດວ່າ, ຖ້າຂ້ອຍ . . . ຖ້າຂ້ອຍຢາກໃຫ້ພະອົງມີຄວາມພາກພູມໃຈນຳຂ້ອຍ, ຂ້ອຍຕ້ອງເຮັດສິ່ງທີ່ພະອົງຢາກໃຫ້ຂ້ອຍເຮັດ.' 'ແມ່ນແລ້ວ, ເຮົາຄິດວ່ານັ້ນເປັນສິ່ງສຳຄັນ,' ຂ້າພະເຈົ້າໄດ້ຕອບໄປ. ບະລາເດີ ສະໄນເດີ ເວົ້າຕໍ່, 'ຂ້ອຍຄິດວ່າ ຂ້ອຍເປັນຫ່ວງຫລາຍໂພດກ່ຽວກັບສິ່ງທີ່ຄົນອື່ນຄິດ ແລະ ບໍ່ຄິດພຽງພໍກ່ຽວກັບສິ່ງທີ່ພະເຈົ້າຄິດ.' ຫລັງຈາກມິດຢູ່ບຶດໜຶ່ງ ແລ້ວບະລາເດີ ສະໄນເດີ ໄດ້ງຶກຫົວ ແລະ ມີສີໜ້າແບບຈິງຈັງ ແລ້ວເວົ້າວ່າ, 'ຂ້ອຍຄິດວ່າຂ້ອຍຕ້ອງຮັບບັບຕິດສະມາ.' ພວກເຮົາບໍ່ຄິດບໍ່ຝັນຕໍ່ຄຳຕອບນີ້. ຂ້າພະເຈົ້າ ແລະ ຄູ່ສອນສາດສະໜາຂອງຂ້າພະເຈົ້າງົງ. ໃນທີ່ສຸດ, ຄູ່ສອນສາດສະໜາຂອງຂ້າພະເຈົ້າໄດ້ເວົ້າວ່າ, 'ແມ່ນແລ້ວ, ນັ້ນເປັນສິ່ງທີ່ຖືກຕ້ອງທີ່ຈະເຮັດ. ຕໍ່ໄປໃນບົດນີ້ ພະຜູ້ຊ່ອຍໃຫ້ລອດໄດ້ສອນວ່າ. . . .' ໃນຂະນະທີ່ຄູ່ສອນສາດສະໜາຂອງຂ້າພະເຈົ້າກຳລັງເວົ້າ ຂ້າພະເຈົ້າຮູ້ສຶກວ່າຈິດໃຈຂອງຂ້າພະເຈົ້າຮ້ອນໄໝ້ ແລະ ມີຄວາມກະຕັນຍູຕໍ່ອຳນາດຂອງພະຄຳພີມໍມອນ."

ຜູ້ສອນສາດສະໜາເຫລົ່ານີ້ໃຊ້ພະຄຳພີມໍມອນແນວໃດ? ທ່ານກັບຄູ່ສອນສາດສະໜາຂອງທ່ານໃຊ້ພະຄຳພີມໍມອນໃຫ້ມີຜົນເພີ່ມຂຶ້ນໃນວຽກງານເຜີຍແຜ່ຂອງທ່ານໄດ້ແນວໃດ?

## ການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດ

- ຝຶກຫັດໃຊ້ພະຄຳພີມໍມອນໃນແຕ່ລະຢ່າງທີ່ມີຢູ່ໃນຫົວຂໍ້ໃຫຍ່ຂອງບົດນີ້.
- ຂຽນການຂັດຄ້ານ ຫລື ຄຳຖາມທີ່ຜູ້ສົນໃຈມີ. ອະທິບາຍຕໍ່ກັນວິທີທີ່ທ່ານຈະຕອບຄຳຖາມເຫລົ່ານີ້ ໂດຍການໃຊ້ພະຄຳພີມໍມອນ.
- ອ່ານຂໍ້ພະຄຳພີຈາກພະຄຳພີມໍມອນນຳກັນ. ແບ່ງປັນຄວາມຮູ້, ຄວາມຮູ້ສຶກ, ແລະ ປະຈັກພະຍານ.
- ຝຶກຫັດໃຊ້ພະຄຳພີມໍມອນເພື່ອຢືນຢັນຂ່າວສານຂອງການຟື້ນຟູ.
- ເລືອກຜູ້ສອນສາດສະໜາທີ່ຍິ່ງໃຫຍ່ຄົນໜຶ່ງໃນພະຄຳພີມໍມອນ. ສົນທະນາ ແລະ ໃຫ້ຜູ້ສອນສາດສະໜາຂຽນລັກສະນະຂອງຜູ້ສອນສາດສະໜາຄົນນີ້. ເຊື້ອເຊີນຜູ້ສອນສາດສະໜາແຕ່ລະຄົນໃຫ້ຕັ້ງເປົ້າໝາຍເພື່ອຈະໃຊ້ໜຶ່ງໃນລັກສະນະເຫລົ່ານີ້. ເຮັດກິດຈະກຳນີ້ຊ້ຳເປັນປະຈຳໂດຍໃຊ້ຜູ້ສອນສາດສະໜາຈາກພະຄຳພີມໍມອນ.
- ເຊື້ອເຊີນຜູ້ສອນສາດສະໜາໃຫ້ແບ່ງປັນປະສົບການ ທີ່ພະຄຳພີມໍມອນໄດ້ຊ່ອຍເຫລືອຜູ້ສົນໃຈຂອງເຂົາເຈົ້າໃນຂັ້ນຕອນການປ່ຽນແປງ.

ໝາຍເຫດ

- ໃຫ້ຜູ້ສອນສາດສະໜາແບ່ງປັນຄຳຕອບທີ່ດີທີ່ສຸດທີ່ມາຈາກພະຄຳພີມໍມອນສຳລັບຄຳຖາມຂອງຈິດວິນຍານ.

## ປະກາດເຜີຍແຜ່

- ສອນຜູ້ສອນສາດສະໜາວິທີໃຊ້ພະຄຳພີມໍມອນໃນການຢືນຢັນຄວາມຈິງຂອງຂ່າວສານຂອງການຟື້ນຟູ.

- ອ່ານ 1 ນີໄຟ 1 ກັບຜູ້ສອນສາດສະໜາ ແລະ ປຽບທຽບບົດພະຄຳພີນີ້ກັບປະສົບການຂອງໂຢເຊັບ ສະມິດ.

- ເອົາພະຄຳພີມໍມອນຫົວທີ່ມີເຈ້ຍໜ້າປົກອ່ອນທີ່ສະອາດໃຫ້ຜູ້ສອນສາດສະໜາ. ໃຫ້ເຂົາເຈົ້າໝາຍດ້ວຍສີຕ່າງກັນ:
  - ຂໍ້ອ້າງອີງແຕ່ລະຂໍ້ກ່ຽວກັບພະເຢຊູຄິດ (ພະນາມຕ່າງໆຂອງພະອົງ ຫລື ຄຳແທນນາມທີ່ອ້າງເຖິງພະອົງ).
  - ຄຳຂອງພະອົງ (ທີ່ເວົ້າໂດຍພະອົງ ຫລື ໂດຍສາດສະດາທັງຫລາຍເມື່ອເຂົາເຈົ້າເວົ້າວ່າ, "ພະຜູ້ເປັນເຈົ້າກ່າວດັ່ງນີ້").
  - ຄຸນສົມບັດຂອງພະອົງ.
  - ຄຳສອນ ແລະ ຫລັກທຳທີ່ມີຢູ່ໃນພະຄຳພີມໍມອນ.

  ໃຫ້ຜູ້ສອນສາດສະໜານັບຈຳນວນຂໍ້ອ້າງອີງ ແລະ ຂຽນຈຳນວນໄວ້ຂ້າງລຸ່ມຂອງແຕ່ລະໜ້າ. ໃນການສຳພາດ ແລະ ລະຫວ່າງການປະຊຸມທ້ອງຖິ່ນລະຍະສອງສາມເດືອນສຳລັບກິດຈະກຳນີ້, ໃຫ້ຜູ້ສອນ ສາດສະໜາແບ່ງປັນຕໍ່ກັນສິ່ງທີ່ເຂົາເຈົ້າໄດ້ຮຽນມາ. ທ່ານຄວນເຮັດກິດຈະກຳຄ້າຍຄືກັນນີ້ ນຳທຸກຄົນໃນໂຄງການເຜີຍແຜ່ເພື່ອໝາຍຂໍ້ອ້າງອີງກ່ຽວກັບສັດທາໃນພະເຢຊູຄິດ, ການກັບໃຈ, ການຮັບບັບຕິດສະມາ, ຂອງປະທານແຫ່ງພະວິນຍານບໍລິສຸດ, ຫລື ຫລັກທຳທີ່ເປັນພື້ນຖານຂອງພະກິດຕິຄຸນ.

- ລະຫວ່າງການສຳພາດ, ໃຫ້ເຊື້ອເຊີນຜູ້ສອນສາດສະໜາແບ່ງປັນຂໍ້ພະຄຳພີຈາກພະຄຳພີມໍມອນທີ່ໄດ້ປ່ຽນແປງຊີວິດຂອງເຂົາເຈົ້ານຳທ່ານ.

- ຊ່ອຍຜູ້ສອນສາດສະໜາໃຫ້ເຫັນວິທີທີ່ພະຄຳພີມໍມອນໄດ້ສອນຄຳສອນຈາກບົດຮຽນຂອງຜູ້ສອນສາດສະໜາ. ຕົວຢ່າງ, ຖ້າຫົວຂໍ້ຄືການຊົດໃຊ້, ໃຫ້ຜູ້ສອນສາດສະໜາຂຽນສ່ວນປະກອບທີ່ສຳຄັນຂອງການຊົດໃຊ້ທີ່ໄດ້ຖືກສອນໃນພະຄຳພີມໍມອນໄວ້ໃນແຖວໜຶ່ງ, ຮ່ວມດ້ວຍຂໍ້ອ້າງອີງຂອງເລື່ອງ. ຫລັງຈາກນັ້ນ, ອີກແຖວສອງ, ໃຫ້ເຂົາເຈົ້າຂຽນສ່ວນປະກອບອັນດຽວກັນທີ່ໄດ້ຖືກສອນໃນພະຄຳພີໄບເບີ້ນ. ໃຫ້ຜູ້ສອນສາດສະໜາຂອງທ່ານປະວ່າງຖ້າຂໍ້ໃດຂາດສ່ວນປະກອບ ຫລື ບໍ່ໄດ້ຖືກສອນໃນພະຄຳພີໄບເບີ້ນ. ຜູ້ສອນສາດສະໜາຈະເຫັນຢ່າງແຈ່ມແຈ້ງວ່າ ພະຄຳພີມໍມອນເປັນຫລັກສຳຄັນຂອງຄຳສອນຂອງເຮົາໄດ້ແນວໃດ. ກິດຈະກຳນີ້ ສາມາດໃຊ້ສຳລັບຄຳສອນອື່ນໆທີ່ຜູ້ສອນສາດສະໜາສອນ.

- ຊອກຫາຄຳຖາມຂອງຈິດວິນຍານທີ່ກ່ຽວຂ້ອງກັບຜູ້ຄົນໃນໂຄງການເຜີຍແຜ່ຂອງທ່ານ. ເຊື້ອເຊີນຜູ້ສອນສາດສະໜາໃຫ້ຊອກຫາຄຳຕອບໃນພະຄຳພີມໍມອນ.



# ເຮົາຈະພັດທະນາຄຸນສົມບັດໃຫ້ເປັນຄືກັນກັບພະຄິດໄດ້ແນວໃດ?

### ໃຫ້ພິຈາລະນາເລື່ອງນີ້

- ເຮົາຈະພັດທະນາຄຸນສົມບັດແນວໃດທີ່ຈະເຮັດໃຫ້ເຮົາເປັນຄູສອນພະກິດຕິຄຸນຂອງພະເຢຊູຄິດ ທີ່ມີພະລັງ ແລະ ໄດ້ຜົນຫລາຍຂຶ້ນ?
- ການພັດທະນາຄຸນສົມບັດໃຫ້ເປັນຄືກັນກັບພະຄິດຈະຊ່ວຍເຮົາໄດ້ແນວໃດໃນການບັນລຸເປົ້າໝາຍຂອງເຮົາໃນຖານະເປັນຜູ້ສອນສາດສະໜາ?
- ເຮົາຕ້ອງພັດທະນາຄຸນສົມບັດອັນໃດໃຫ້ດີຂຶ້ນກວ່າເກົ່າ?

ເມື່ອພະເຢຊູຄິດເລີ່ມຕົ້ນພາລະກິດຂອງພະອົງໃນໂລກນີ້, ພະອົງໄດ້ຍ່າງໄປໃກ້ຝັ່ງທະເລ ຄາລີເລ ແລະ ເອີ້ນອອກໄປຫາຊາວປະມົງສອງຄົນ, ຊື່ວ່າ ເປໂຕ ແລະ ອັນເດອາ. ພະອົງໄດ້ກ່າວວ່າ, "ຈົ່ງໄປກັບເຮົາ ແລະ ເຮົາຈະສິດສອນພວກທ່ານໃຫ້ເປັນຜູ້ຫາຄົນ" (ມັດທາຍ 4:19; ເບິ່ງມາລະໂກ 1:17 ນຳອີກ). ພະຜູ້ເປັນເຈົ້າໄດ້ເອີ້ນທ່ານໃຫ້ເຮັດວຽກງານຂອງພະອົງຄືກັນ, ແລະ ພະອົງເຊື້ອເຊີນທ່ານໃຫ້ຕິດຕາມພະອົງ. ການເຊື້ອເຊີນໃຫ້ຕິດຕາມພະຄິດ ແມ່ນການເຊື້ອເຊີນໃຫ້ເຮັດຕາມຕົວຢ່າງຂອງພະອົງ ແລະ ເປັນຄືກັນກັບພະອົງ.

ບາງບົດ ໃນປຶ້ມ *ຈົ່ງສອນພະກິດຕິຄຸນຂອງເຮົາ* ໄດ້ເຈາະຈົງໃນສິ່ງທີ່ທ່ານຕ້ອງເຮັດ ໃນຖານະເປັນຜູ້ສອນສາດສະໜາ—ວິທີທີ່ຈະສຶກສາ, ວິທີທີ່ຈະສອນ, ແລະ ວິທີທີ່ຈະໃຊ້ເວລາຢ່າງສະຫລາດ. ການເປັນຄົນແນວໃດຂອງທ່ານ ກໍສຳຄັນເທົ່າໆກັບສິ່ງທີ່ທ່ານເຮັດ.

ພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່ສາມາດຊ່ວຍໃຫ້ທ່ານກາຍເປັນຄືກັນກັບພະບິດາເທິງສະຫວັນ ແລະ ພະເຢຊູຄິດໄດ້. ພະຜູ້ຊ່ອຍໃຫ້ລອດໄດ້ສະແດງຫົນທາງ. ພະອົງໄດ້ຕັ້ງຕົວຢ່າງທີ່ດີພ້ອມ, ແລະ ພະອົງບັນຊາເຮົາໃຫ້ເປັນຄືກັນກັບພະອົງ (ເບິ່ງ 3 ນີໄຟ 27:27). ຈົ່ງຮຽນຮູ້ກ່ຽວກັບພະອົງ ແລະ ພະຍາຍາມນຳໃຊ້ຄຸນສົມບັດຂອງພະອົງໃນຊີວິດຂອງທ່ານ. ຜ່ານອຳນາດຂອງການຊົດໃຊ້ຂອງພະອົງ, ທ່ານຈະສາມາດບັນລຸເປົ້າໝາຍນີ້ ແລະ ນຳພາຄົນອື່ນໆ ໃຫ້ບັນລຸເປົ້າໝາຍນີ້ຄືກັນ.

ພະຄຳພີອະທິບາຍເຖິງຄຸນສົມບັດໃຫ້ເປັນຄືກັນກັບພະຄິດ ທີ່ທ່ານຕ້ອງພັດທະນາໃນຖານະເປັນຜູ້ສອນສາດສະໜາ ແລະ ຕະຫລອດຊີວິດຂອງທ່ານ. ໃຫ້ສຶກສາຂໍ້ພະຄຳພີທີ່ມີຢູ່ໃນບົດນີ້ ແລະ ຊອກຫາຕົວຢ່າງອື່ນໆກ່ຽວກັບຄຸນສົມບັດໃຫ້ເປັນຄືກັນກັບພະຄິດເມື່ອທ່ານສຶກສາຂໍ້ພະຄຳພີອື່ນໆ.

ໝາຍເຫດ

ໝາຍເຫດ

ຄຸນສົມບັດຢ່າງພະຄຣິດຄື ຂອງປະທານຈາກພະເຈົ້າ. ສິ່ງນີ້ມາສູ່ເມື່ອທ່ານໃຊ້ສິດຂອງທ່ານຢ່າງຊອບທຳ. ທູນຂໍໃຫ້ພະບິດາເທິງສະຫວັນຂອງທ່ານປະທານພອນໃຫ້ທ່ານ ໂດຍການມອບຄຸນສົມບັດເຫລົ່ານີ້ໃຫ້ທ່ານ; ທ່ານບໍ່ສາມາດພັດທະນາສິ່ງເຫລົ່ານີ້ປາດສະຈາກການຊ່ອຍເຫລືອຂອງພະອົງ. ດ້ວຍຄວາມປາດຖະໜາທີ່ຈະເຮັດໃຫ້ພະເຈົ້າພໍໃຈ, ທ່ານຕ້ອງຮູ້ຈັກຄວາມອ່ອນແອຂອງທ່ານ ແລະ ເຕັມໃຈ ແລະ ກະຕືລືລົ້ນທີ່ຈະປັບປຸງໃຫ້ດີຂຶ້ນ.

### ການສຶກສາພະຄຳພີ

**ຂໍ້ພະຄຳພີເຫລົ່ານີ້ເວົ້າຫຍັງແດ່ກ່ຽວກັບການເຮັດຕາມຕົວຢ່າງຂອງພະເຢຊູຄຣິດ?**

3 ນີໄຟ 12:48
ໂຢຮັນ 13:1–16
1 ເປໂຕ 2:21
3 ນີໄຟ 27:21, 27

**ແມ່ນຫຍັງຄືຄວາມສຳພັນລະຫວ່າງຫລັກທຳເບື້ອງຕົ້ນແຫ່ງພະກິດຕິຄຸນ ແລະ ຄຸນສົມບັດໃຫ້ເປັນຄືກັນກັບພະຄຣິດ?**

ໂມໂລໄນ 8:25–26

## ແນວຄິດສຳລັບການສຶກສາບົດນີ້

ມີຫລາຍໆວິທີທີ່ທ່ານອາດຈະໃຊ້ສຳລັບການສຶກສາບົດນີ້. ພະຍາຍາມໃຊ້ໜຶ່ງໃນຈຳນວນແນວຄິດດັ່ງຕໍ່ໄປນີ້:

- ເມື່ອທ່ານເຮັດ "ກິດຈະກຳກ່ຽວກັບຄຸນສົມບັດ" ໃນທ້າຍບົດນີ້ແລ້ວ, ໃຫ້ຊອກຫາຄຸນສົມບັດ ທີ່ທ່ານຕ້ອງການ ຫລື ປາກຈະພັດທະນາຫລາຍທີ່ສຸດ. ສຶກສາພາກທີ່ກ່ຽວກັບຄຸນສົມບັດນັ້ນ, ແລະ ຕັ້ງເປົ້າໝາຍ ເພື່ອຈະພັດທະນາມັນ.
- ອ່ານບົດນີ້ປາດສະຈາກການສຶກສາພະຄຳພີ, ແລະ ຕັດສິນໃຈວ່າ ທ່ານຢາກສຶກສາຄຸນສົມບັດອັນໃດເພີ່ມເຕີມ. ຫລັງຈາກນັ້ນ ໃຫ້ສຶກສາຂໍ້ພະຄຳພີທີ່ສຳຄັນເຊິ່ງພົວພັນກັບຄຸນສົມບັດນັ້ນ. ໃຫ້ຊອກຫາຂໍ້ພະຄຳພີອື່ນໆທີ່ບໍ່ມີໃນບົດນີ້ເຊິ່ງສອນກ່ຽວກັບຄຸນສົມບັດນັ້ນ. ບັນທຶກແນວຄິດເພື່ອຈະພັດທະນາຄຸນສົມບັດນັ້ນໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.
- ຊອກຫາຄຸນສົມບັດທີ່ທ່ານຢາກສຶກສາ. ເຮັດຕາມແບບແຜນພາຍໃຕ້ຫົວຂໍ້ "ການພັດທະນາຄຸນສົມບັດໃຫ້ເປັນຄືກັນກັບພະຄຣິດ" ທີ່ມີຢູ່ໃນທ້າຍບົດ.

## ສັດທາໃນພະເຢຊູຄຣິດ

ເມື່ອທ່ານມີສັດທາໃນພະຄຣິດ, ທ່ານເຊື່ອໃນພະອົງວ່າເປັນພະບຸດຂອງພະເຈົ້າ, ອົງດຽວທີ່ຖືກຳເນີດ ຂອງພະບິດາໃນເນື້ອໜັງ. ທ່ານຍອມຮັບພະອົງເປັນພະຜູ້ຊ່ອຍໃຫ້ລອດ ແລະ ພະຜູ້ໄຖ່ຂອງທ່ານ ແລະ ເຮັດ ຕາມຄຳສອນຂອງພະອົງ. ທ່ານເຊື່ອວ່າບາບຂອງທ່ານຈະໄດ້ຮັບການໃຫ້ອະໄພຜ່ານການຊົດໃຊ້ຂອງພະອົງ. ສັດທາໃນພະອົງໝາຍຄວາມວ່າ ທ່ານໄວ້ວາງໃຈພະອົງ ແລະ ມີຄວາມໝັ້ນໃຈວ່າ ພະອົງຮັກທ່ານ.



© 1989 Conceptions Unlimited Investments, Inc. ຫ້າມລອກແບບ.

ສັດທາພາໃຫ້ເກີດການປະຕິບັດ, ຮ່ວມດ້ວຍ ການກັບໃຈ, ການເຊື່ອຟັງ, ແລະ ການຮັບໃຊ້ຢ່າງອຸທິດຕົນ. ເມື່ອ ທ່ານມີສັດທາໃນພະເຢຊູຄຣິດ, ທ່ານໄວ້ວາງໃຈພະອົງພຽງພໍທີ່ຈະເຮັດຕາມພະບັນຍັດຂອງພະອົງ—ເຖິງແມ່ນວ່າທ່ານບໍ່ເຂົ້າໃຈເຫດຜົນທັງໝົດ. ທ່ານເຮັດສິ່ງທີ່ພະຜູ້ເປັນເຈົ້າປາດຖະໜາໃຫ້ທ່ານເຮັດໃຫ້ສຳເລັດ. ທ່ານຊ່ອຍເຮັດໃຫ້ຄວາມດີເກີດຂຶ້ນໃນຊີວິດຂອງທ່ານເອງ ແລະ ໃນຊີວິດຂອງຄົນອື່ນໆ. ທ່ານສາມາດເຮັດສິ່ງມະຫັດສະຈັນຕາມຄວາມປາດຖະໜາຂອງພະຜູ້ເປັນເຈົ້າ. ສັດທາຂອງທ່ານຈະສະແດງຜ່ານຄວາມພະຍາຍາມ ແລະ ວຽກງານຂອງທ່ານ.

ສັດທາຄືຫລັກທຳແຫ່ງອຳນາດ. ພະເຈົ້າເຮັດວຽກງານໂດຍໃຊ້ອຳນາດ, ແຕ່ວ່າສ່ວນຫລາຍອຳນາດຂອງພະອົງຖືກໃຊ້ເປັນການຕອບສະໜອງຕໍ່ສັດທາ (ເບິ່ງ ໂມໂຣໄນ 10:7). ພະອົງເຮັດວຽກງານຕາມສັດທາຂອງລູກໆຂອງພະອົງ. ຄວາມສົງໄສ ແລະ ຄວາມຢ້ານຄືສິ່ງທີ່ຄັດຄ້ານຕໍ່ສັດທາ.

ສັດທາຂອງທ່ານຈະເພີ່ມຂຶ້ນຜ່ານການສຶກສາຢ່າງພາກພຽນ, ການອະທິຖານ, ການຮັບໃຊ້ຢ່າງເອົາໃຈໃສ່, ແລະ ການເຊື່ອຟັງຕໍ່ການກະຕຸ້ນຂອງພະວິນຍານບໍລິສຸດ ແລະ ພະບັນຍັດທັງຫລາຍ.

ສັດທາຂອງທ່ານໃນພະເຢຊູຄິດຈະເພີ່ມຂຶ້ນເມື່ອທ່ານຮູ້ຈັກພະອົງ ແລະ ຄຳສອນຂອງພະອົງຫລາຍຂຶ້ນ. ເມື່ອທ່ານຄົ້ນຄວ້າພະຄຳພີ ແລະ ຊອກຫາພະຄຳພີ, ທ່ານຈະຮຽນຮູ້ກ່ຽວກັບວິທີທາງຂອງພະອົງ, ຄວາມຮັກຂອງພະອົງຕໍ່ທຸກຄົນ, ແລະ ພະບັນຍັດຂອງພະອົງ.

ສັດທາແມ່ນຮ່ວມດ້ວຍຄວາມໝັ້ນໃຈໃນພາລະກິດ ແລະ ອຳນາດຂອງພະວິນຍານບໍລິສຸດ. ຜ່ານສັດທາ ທ່ານຈະໄດ້ຮັບຄຳຕອບຕໍ່ຄຳອະທິຖານຂອງທ່ານ ແລະ ການເປີດເຜີຍສ່ວນຕົວ ເພື່ອຈະນຳພາທ່ານໃນວຽກງານຂອງພະຜູ້ເປັນເຈົ້າ.

### ການສຶກສາພະຄຳພີ

**ສັດທາແມ່ນຫຍັງ?**

| | | |
|---|---|---|
| ແອລະມາ 32:21 | ເຮັບເລີ 11:1; see footnote *b* in the LDS English Bible | Guide to the Scriptures, “Faith” |
| Ether 12:6 | | *True to the Faith*, “Faith,” 54–56 |

**ທ່ານຈະມີສັດທາໄດ້ແນວໃດ, ແລະ ທ່ານຈະເຮັດຫຍັງໄດ້ແດ່ຜ່ານສັດທາ?**

| | | |
|---|---|---|
| 2 Nephi 25:29 | ແອລະມາ 32 | ໂມໂຣໄນ 7:33 |
| 2 Nephi 26:13 | ຣີລາມັນ 15:7–8 | ໂລມ 10:17 |
| ໂມໄຊຢາ 4:6–12 | Ether 12:7–22 | ເຮັບເລີ 11 |

**ພອນອັນໃດເກີດຂຶ້ນຜ່ານສັດທາ?**

| | | |
|---|---|---|
| ໂມໄຊຢາ 3:17 | Helaman 5:9–12 | ໂຢຮັນ 14:6 |
| ໂມໄຊຢາ 5:1–15 | | |

## ຄວາມຫວັງ

ຄວາມຫວັງແມ່ນຄວາມໄວ້ວາງໃຈຢ່າງຕະຫລອດໄປວ່າພະຜູ້ເປັນເຈົ້າຈະເຮັດຕາມຄຳສັນຍາທີ່ໃຫ້ໄວ້ກັບທ່ານໃຫ້ສຳເລັດ. ຄວາມຫວັງໄດ້ຖືກສະແດງໃນຄວາມໝັ້ນໃຈ, ການເບິ່ງໂລກໃນແງ່ດີ, ຄວາມກະຕືລືລົ້ນ, ແລະຄວາມພາກພຽນຢ່າງອົດທົນ. ມັນຄືຄວາມເຊື່ອ ແລະ ຄວາມຄາດຫວັງວ່າສິ່ງໃດສິ່ງໜຶ່ງຈະເກີດຂຶ້ນ. ເມື່ອທ່ານມີຄວາມຫວັງ, ທ່ານຈະພະຍາຍາມຕໍ່ການທົດສອບ ແລະ ຄວາມຫຍຸ້ງຍາກດ້ວຍຄວາມໝັ້ນໃຈ ແລະ ແນ່ໃຈວ່າທຸກສິ່ງທຸກຢ່າງຈະເປັນໄປເພື່ອເປັນຜົນດີສຳລັບທ່ານ. ຄວາມຫວັງຊ່ອຍທ່ານເອົາຊະນະຄວາມທໍ້ຖອຍໃຈ. ຫລາຍຄັ້ງພະຄຳພີບັນລະຍາຍຄວາມຫວັງໃນພະເຢຊູຄິດວ່າ ເປັນການຮັບປະກັນວ່າທ່ານຈະໄດ້ຮັບຊີວິດນິລັນດອນໃນອານາຈັກຊັ້ນສູງ.

> “ໂດຍທີ່ໄດ້ຮັບພອນດ້ວຍຄວາມຫວັງ, ຂໍໃຫ້ພວກເຮົາ, ໃນຖານະເປັນສານຸສິດ, ຍິ້ມຫາທຸກຄົນທີ່ໄດ້ ‘ໃຫ້ຄວາມຫວັງ . . . ຄອນແຄນໄປ’ (ໂກໂລຊາຍ 1:23) ບໍ່ວ່າດ້ວຍເຫດຜົນໃດກໍຕາມ. ຂໍໃຫ້ເຮົາຊ່ອຍຍົກມືທີ່ອ່ອນເພຍຢ່າງບໍ່ມີຄວາມຫວັງ.”
>
> – ແອວເດີ ນຽວ ເອ ແມກສະແວວ
>
> “BRIGHTNESS OF HOPE,” *ENSIGN*, NOV. 1994, 36

ປະທານ ເຈມ ອີ. ຟາວ ໄດ້ສອນວ່າ:

“ຄວາມຫວັງຄືສິ່ງຄ້ຳຈູນຈິດວິນຍານຂອງເຮົາ. . . .

ຄວາມຫວັງຄືຄວາມເຊື່ອໝັ້ນໃນຄຳສັນຍາຂອງພະເຈົ້າ, ເປັນສັດທາຄືວ່າ ຖ້າເຮົາເຮັດດຽວນີ້, ພອນທີ່ເຮົາຢາກໄດ້ຈະເກີດຂຶ້ນໃນອະນາຄົດ. . . .

ໝາຍເຫດ

ໝາຍເຫດ

ແຫລ່ງທີ່ເພິ່ງພາໄດ້ຂອງຄວາມຫວັງຂອງເຮົາຄື ເຮົາເປັນບຸດ ແລະ ທິດາຂອງພະເຈົ້າ ແລະ ວ່າພະບຸດຂອງພະອົງ, ພະຜູ້ເປັນເຈົ້າພະເຢຊູຄິດ, ໄດ້ກູ້ເຮົາຈາກຄວາມຕາຍ" ("Hope, an Anchor of the Soul," *Ensign*, Nov. 1999, 59–60).

**ການສຶກສາພະຄຳພີ**

**ຄວາມຫວັງແມ່ນຫຍັງ ແລະ ເຮົາຫວັງຫຍັງແດ່?**

| | | |
|---|---|---|
| 2 ນີໄຟ 31:20 | ໂມໂລໄນ 7:40–48 | ໂລມ 8:24–25 |
| Alma 58:10–11 | D&C 59:23 | ເຮັບເລີ 6:10–20 |
| Ether 12:4, 32 | D&C 138:14 | Guide to the Scriptures, "Hope" |

## ຄວາມໃຈບຸນ ແລະ ຄວາມຮັກ

ຄັ້ງໜຶ່ງຊາຍຄົນໜຶ່ງໄດ້ຖາມພະເຢຊູວ່າ, "ຄຳສັ່ງຂໍ້ສຳຄັນທີ່ສຸດໃນພະບັນຍັດແມ່ນຂໍ້ໃດ?" ພະເຢຊູຕອບວ່າ: "ຈົ່ງຮັກພະຜູ້ເປັນເຈົ້າອົງເປັນພະເຈົ້າຂອງເຈົ້າ ດ້ວຍສຸດຫົວໃຈ, ດ້ວຍສຸດຈິດ, ແລະ ດ້ວຍສຸດຄວາມຄິດຂອງເຈົ້າ. ນີ້ແມ່ນຄຳສັ່ງຂໍ້ໃຫຍ່ ແລະ ຂໍ້ສຳຄັນທີ່ສຸດ. ຄຳສັ່ງຂໍ້ທີສອງທີ່ມີຄວາມສຳຄັນຄືກັນ: ຈົ່ງຮັກເພື່ອນມະນຸດຂອງເຈົ້າເໝືອນຮັກເຈົ້າເອງ." (ມັດທາຍ 22:36–39).



© 2001 Simon Dewey. ຫ້າມລອກແບບ.

ຄວາມໃຈບຸນຄື "ຄວາມຮັກອັນບໍລິສຸດຂອງພະຄິດ" (ໂມໂລໄນ 7:47). ມັນຮ່ວມດ້ວຍຄວາມຮັກນິລັນດອນຂອງພະເຈົ້າຕໍ່ລູກທັງໝົດຂອງພະອົງ. ເຮົາຕ້ອງພະຍາຍາມພັດທະນາຄວາມຮັກແບບນັ້ນ. ເມື່ອທ່ານເຕັມໄປດ້ວຍຄວາມໃຈບຸນ, ທ່ານຈະເຊື່ອຟັງພະບັນຍັດຂອງພະເຈົ້າ ແລະ ເຮັດທຸກສິ່ງທີ່ທ່ານສາມາດເຮັດໄດ້ ເພື່ອຮັບໃຊ້ຄົນອື່ນ ແລະ ຊ່ອຍເຫລືອເຂົາເຈົ້າໃຫ້ໄດ້ຮັບພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່.

ຄວາມໃຈບຸນຄືຂອງປະທານຈາກພະເຈົ້າ. ສາດສະດາ ໂມໂລໄນ ໄດ້ກ່າວວ່າເຮົາຄວນ "ສວດອ້ອນວອນ ຫາພະບິດາດ້ວຍສຸດພະລັງຂອງໃຈ ເພື່ອ [ເຮົາ] ຈະເຕັມໄປດ້ວຍຄວາມຮັກນີ້" (ໂມໂລໄນ 7:48). ເມື່ອທ່ານເຮັດ ຕາມຄຳສັ່ງສອນນີ້ ແລະ ພະຍາຍາມເຮັດສິ່ງທີ່ຊອບທຳ, ຄວາມຮັກຂອງທ່ານຕໍ່ຜູ້ຄົນທັງຫລາຍຈະເພີ່ມຂຶ້ນ, ໂດຍສະເພາະ ໃນບັນດາຜູ້ຄົນທີ່ທ່ານຮັບໃຊ້. ທ່ານຈະຮູ້ສຶກເປັນຫ່ວງຢ່າງຈິງໃຈຕໍ່ການເປັນຢູ່ນິລັນດອນ ແລະ ຄວາມສຸກຂອງຄົນອື່ນໆ. ທ່ານຈະເຫັນເຂົາເຈົ້າວ່າເປັນລູກໆຂອງພະເຈົ້າ ເຊິ່ງມີຄວາມສາມາດທີ່ຈະກາຍເປັນເໝືອນດັ່ງພະບິດາເທິງສະຫວັນຂອງເຮົາໄດ້, ແລະ ທ່ານຈະເຮັດວຽກງານເພື່ອເຂົາເຈົ້າ. ທ່ານຈະບໍ່ມີຄວາມຮູ້ສຶກທີ່ບໍ່ດີດັ່ງເຊັ່ນຄວາມໂມໂຫ, ຄວາມອິດສາ, ຕັນຫາ, ຫລື ຄວາມໂລບມາກ. ທ່ານຈະບໍ່ຕັດສິນຄົນອື່ນ, ບໍ່ວິຈານ, ບໍ່ເວົ້າສິ່ງທີ່ບໍ່ດີກ່ຽວກັບເຂົາເຈົ້າ. ທ່ານຈະພະຍາຍາມເຂົ້າໃຈເຂົາເຈົ້າ ແລະ ຄວາມຄິດເຫັນຂອງເຂົາເຈົ້າ. ທ່ານຈະອົດທົນນຳເຂົາເຈົ້າ ແລະ ພະຍາຍາມຊ່ອຍເຫລືອເຂົາເຈົ້າເມື່ອເຂົາເຈົ້າກຳລັງດີ້ນລົນ ຫລື ທໍ້ຖອຍໃຈ. ຄວາມໃຈບຸນ, ຄືກັນກັບສັດທາ ຈະນຳໄປສູ່ການກະທຳ. ທ່ານຈະພັດທະນາຄວາມໃຈບຸນເມື່ອທ່ານຊອກຫາໂອກາດທີ່ຈະຮັບໃຊ້ ແລະ ແບ່ງປັນເວລາຂອງທ່ານໃຫ້ຄົນອື່ນໆ.

**ການສຶກສາພະຄຳພີ**

**ຄວາມໃຈບຸນແມ່ນຫຍັງ?**

| | | |
|---|---|---|
| ໂມໂລໄນ 7:45–48 | 1 ໂກລິນໂທ 13 | Guide to the Scriptures, "Charity" |

ໝາຍເຫດ

**ພະເຍຊູຄຣິດໄດ້ສະແດງຄວາມໃຈບຸນແນວໃດ?**

1 Nephi 19:9 | Ether 12:33–34 | ລູກາ 7:12–15
Alma 7:11–13

**ຂໍ້ພະຄຳພີເຫລົ່ານີ້ສອນທ່ານຫຍັງແດ່ກ່ຽວກັບຄວາມໃຈບຸນ?**

2 Nephi 26:30 | Alma 7:24 | 1 ຕີໂມທີ 4:12
ໂມໄຊຢາ 2:17 | Ether 12:28 | 1 ເປໂຕ 4:8; see footnote *a* in the LDS English Bible
Mosiah 28:3 | D&C 88:125

## ຄວາມດີ

ຄວາມດີເລີ່ມຕົ້ນໃນຄວາມຄິດ ແລະ ຄວາມປາດຖະໜາໃນສ່ວນເລິກຂອງຈິດໃຈທ່ານ. ມັນເປັນແບບແຜນຂອງຄວາມຄິດ ແລະ ການປະພຶດ ທີ່ມີພື້ນຖານຂອງມາດຕະຖານສິນທຳທີ່ສູງ. ເພາະພະວິນຍານບໍລິສຸດບໍ່ໄດ້ສະຖິດຢູ່ນຳຄົນທີ່ບໍ່ບໍລິສຸດ, ຄວາມດີຄືສິ່ງທີ່ຈຳເປັນຕ້ອງມີເພື່ອຈະໄດ້ຮັບການນຳພາຂອງພະວິນຍານ. ສິ່ງທີ່ທ່ານເລືອກຄິດເຖິງ ແລະ ເຮັດເມື່ອເວລາທ່ານຢູ່ຜູ້ດຽວ ແລະ ທ່ານຄິດວ່າບໍ່ມີໃຜເບິ່ງທ່ານ ຄືສິ່ງວັດແທກອັນສຳຄັນອັນກ່ຽວກັບຄວາມດີຂອງທ່ານ.

ຄົນທີ່ມີຄວາມດີເປັນຄົນທີ່ສະອາດ ແລະ ບໍລິສຸດທາງວິນຍານ. ເຂົາເຈົ້າຕັ້ງໃຈໃສ່ຕໍ່ຄວາມຄິດທີ່ຊອບທຳທີ່ເຮັດໃຫ້ເບີກບານ ແລະ ກຳຈັດຄວາມຄິດທີ່ບໍ່ມີຄ່າຄວນເຊິ່ງນຳໄປສູ່ການກະທຳທີ່ບໍ່ເໝາະສົມອອກໄປຈາກສະໝອງ. ເຂົາເຈົ້າເຊື່ອຟັງພະບັນຍັດຂອງພະເຈົ້າ ແລະ ເຮັດຕາມຄຳສັ່ງສອນຂອງຜູ້ນຳໃນສາດສະໜາຈັກ. ເຂົາເຈົ້າອະທິຖານເພື່ອໃຫ້ມີຄວາມເຂັ້ມແຂງທີ່ຈະຕໍ່ຕ້ານການລໍ້ລວງ ແລະ ເຮັດສິ່ງທີ່ຖືກຕ້ອງ. ເຂົາເຈົ້າກັບໃຈຈາກບາບ ຫລື ການເຮັດຜິດອັນໃດກໍຕາມຢ່າງໄວ. ເຂົາເຈົ້າດຳລົງຊີວິດໃຫ້ມີຄ່າຄວນທີ່ຈະມີໃບຮັບຮອງເຂົ້າພະວິຫານ.

ສະໝອງຂອງທ່ານຄືກັນກັບເວທີໃນໂຮງລະຄອນ; ແຕ່ວ່າ ໃນໂຮງລະຄອນຂອງສະໝອງຂອງທ່ານ, ມີນັກສະແດງຜູ້ດຽວເທົ່ານັ້ນທີ່ສາມາດຢູ່ເທິງເວທີໄດ້. ຖ້າວ່າເວທີວ່າງເປົ່າ, ຄວາມຄິດແຫ່ງຄວາມມືດ ແລະ ບາບຈະຂຶ້ນໄປເທິງເວທີເພື່ອລໍ້ລວງ. ແຕ່ວ່າຄວາມຄິດເຫລົ່ານີ້ບໍ່ມີອຳນາດຖ້າວ່າເວທີຂອງສະໝອງຂອງທ່ານກຳລັງຕັ້ງໃຈໃສ່ເຖິງຄວາມຄິດທີ່ຊອບທຳ, ດັ່ງເຊັ່ນເພງສວດ ຫລື ຂໍ້ພະຄຳພີທີ່ທ່ານໄດ້ທ່ອງຈຳ ທີ່ທ່ານສາມາດເອີ້ນຫາໄດ້ໃນລະຍະເວລາທີ່ທ່ານຖືກລໍ້ລວງ. ໂດຍການບັງຄັບເວທີຂອງສະໝອງຂອງທ່ານ, ທ່ານຈະສາມາດຕໍ່ຕ້ານຄວາມຢາກທີ່ບໍ່ຢຸດຢັ້ງ, ການຍອມແພ້ຕໍ່ສິ່ງລໍ້ລວງ ແລະ ປ່ອຍຕົວໃຫ້ບາບໄດ້. ທ່ານຈະສາມາດກາຍເປັນຄົນທີ່ບໍລິສຸດ ແລະ ມີຄວາມດີ.

**ການສຶກສາພະຄຳພີ**

**ການມີຄວາມດີໝາຍຄວາມວ່າແນວໃດ?**

D&C 4:6 | D&C 46:33 | 2 ເປໂຕ 1:3–8
D&C 25:2 | D&C 121:45–46 | Guide to the Scriptures, "Virtue"
D&C 38:24 | ຫລັກແຫ່ງຄວາມເຊື່ອ 1:13

## ຄວາມຮູ້

ພະຜູ້ເປັນເຈົ້າໄດ້ບັນຊາວ່າ ໃຫ້ສະແຫວງຫາຄວາມຮູ້, ໂດຍການສຶກສາ ແລະ ດ້ວຍສັດທາ (see D&C 88:118). ພະອົງຍັງໄດ້ເຕືອນອີກວ່າ ເປັນໄປບໍ່ໄດ້ທີ່ມະນຸດຈະລອດໃນຄວາມບໍ່ມີຄວາມຮູ້ (see D&C 131:6). ຈົ່ງສະແຫວງຫາຄວາມຮູ້, ໂດຍສະເພາະ ຄວາມຮູ້ທາງວິນຍານ. ສຶກສາພະຄຳພີທຸກໆວັນ, ແລະ ສຶກສາຄຳຂອງສາດສະດາທີ່ມີຊີວິດຢູ່ທັງຫລາຍນຳອີກ. ຜ່ານການສຶກສາ ແລະ ການອະທິຖານ, ໃຫ້ຊອກຫາຄວາມຊ່ອຍເຫລືອສຳລັບຄຳຖາມຕ່າງໆ, ການທ້າທາຍ, ແລະໂອກາດຂອງທ່ານ. ໃຫ້ຕັ້ງໃຈເປັນພິເສດຕໍ່ຂໍ້ພະຄຳພີທີ່ທ່ານສາມາດໃຊ້ເມື່ອທ່ານສອນ ແລະ ເມື່ອທ່ານຕອບຄຳຖາມກ່ຽວກັບພະກິດຕິຄຸນທີ່ໄດ້ຖືກຟື້ນຟູຄືນມາໃໝ່.

ໝາຍເຫດ

ໃຫ້ຄິດເຖິງວິທີທີ່ທ່ານຈະສາມາດໃຊ້ຫລັກທຳພະກິດຕິຄຸນໃນຊີວິດຂອງທ່ານ. ເມື່ອທ່ານສຶກສາຢ່າງເອົາໃຈໃສ່, ຈິ່ງອະທິຖານ, ແລະ ດ້ວຍເຈດຕະນາອັນບໍລິສຸດ, ພະວິນຍານບໍລິສຸດຈະເພີ່ມຄວາມຮູ້ໃຫ້ສະໝອງຂອງທ່ານ, ສອນທ່ານ, ແລະ ຊ່ອຍໃຫ້ທ່ານເຂົ້າໃຈຄວາມໝາຍຂອງພະຄຳພີ ແລະ ຄຳສອນຂອງສາດສະດາທີ່ມີຊີວິດຢູ່ທັງຫລາຍ. ອີກຢ່າງໜຶ່ງ ທ່ານກໍສາມາດໄດ້ຮັບຄວາມຮູ້ໂດຍການເບິ່ງ ແລະ ຟັງຄົນອື່ນໆນຳອີກ, ໂດຍສະເພາະ ຜູ້ນຳໃນສາດສະໜາຈັກ. ຄືກັນກັບນີໄຟ, ທ່ານສາມາດເວົ້າວ່າ: "ຈິດວິນຍານຂອງຂ້າພະເຈົ້າເບີກບານໃນພະຄຳພີ ແລະ ຈິດໃຈຂອງຂ້າພະເຈົ້າຄຳນຶງຄິດເຖິງຂໍ້ຄວາມນັ້ນ. . . . ຈົ່ງເບິ່ງ ຈິດວິນຍານຂອງຂ້າພະເຈົ້າເບີກບານໃນເລື່ອງຂອງພະຜູ້ເປັນເຈົ້າ ແລະ ຈິດໃຈຂອງຂ້າພະເຈົ້າຄິດຄຳນຶງຢູ່ຕະຫລອດເວລາ ເຖິງເລື່ອງທີ່ຂ້າພະເຈົ້າໄດ້ເຫັນ ແລະ ໄດ້ຍິນມາ" (2 ນີໄຟ 4:15–16).

## ການສຶກສາພະຄຳພີ

**ຄວາມຮູ້ຊ່ອຍເຫລືອເຮົາໄດ້ແນວໃດໃນການເຮັດວຽກງານຂອງພະຜູ້ເປັນເຈົ້າ?**

| | |
|---|---|
| Alma 17:2–3 | D&C 88:77–80 |

**ທ່ານຈະໄດ້ຮັບຄວາມຮູ້ໄດ້ແນວໃດ?**

| | | |
|---|---|---|
| 2 ນີໄຟ 32:1–5 | D&C 42:61 | D&C 88:118 |
| ໂມໂລໄນ 10:5 | D&C 76:5–10 | Guide to the Scriptures, "Knowledge" |

## ຄວາມອົດທົນ

ຄວາມອົດທົນຄືຄວາມສາມາດທີ່ຈະອົດທົນຕໍ່ ຄວາມລ່າຊ້າ, ຄວາມຫຍຸ້ງຍາກ, ການຄັດຄ້ານ, ຫລື ຄວາມທຸກທໍລະມານທີ່ປາດສະຈາກຄວາມໃຈຮ້າຍ, ທໍ້ຖອຍໃຈ, ຫລື ກະວົນກະວາຍ. ມັນຄືຄວາມສາມາດທີ່ຈະເຮັດຕາມຄວາມປາດຖະໜາຂອງພະເຈົ້າ ແລະ ຍອມຮັບເວລາຂອງພະອົງ. ເມື່ອທ່ານອົດທົນ, ທ່ານຈະທົນຕໍ່ການທົດສອບໄດ້ ແລະ ສາມາດປະສົບກັບຄວາມລຳບາກໄດ້ຢ່າງໃຈເຢັນ ແລະ ດ້ວຍຄວາມຫວັງ. ຄວາມອົດທົນກ່ຽວພັນກັບຄວາມຫວັງ ແລະ ສັດທາ—ທ່ານຕ້ອງຖ້າພອນທີ່ພະຜູ້ເປັນເຈົ້າໄດ້ສັນຍາໄວ້ຈົນກວ່າມັນຈະເກີດຂຶ້ນ.

ທ່ານຕ້ອງມີຄວາມອົດທົນໃນປະສົບການປະຈຳວັນ ແລະ ຄວາມສຳພັນຕ່າງໆຂອງທ່ານ, ໂດຍສະເພາະນຳຄູ່ສອນສາດສະໜາຂອງທ່ານ. ທ່ານຕ້ອງອົດທົນນຳທຸກໆຄົນ, ຮ່ວມດ້ວຍຕົວຂອງທ່ານເອງ, ເມື່ອທ່ານພະຍາຍາມເອົາຊະນະຄວາມຜິດ ແລະ ຄວາມອ່ອນແອຂອງທ່ານ.

> *"ຊີວິດນີ້ເຕັມໄປດ້ວຍຄວາມຫຍຸ້ງຍາກ, ບາງສິ່ງເປັນເລື່ອງເລັກນ້ອຍ ແລະ ບາງສິ່ງເປັນເລື່ອງໃຫຍ່. ເບິ່ງຄືວ່າມີການທ້າທາຍຢ່າງບໍ່ມີການສິ້ນສຸດສຳລັບທຸກໆຄົນ. ບັນຫາຂອງເຮົາສ່ວນຫລາຍແມ່ນເຮົາຄາດຫວັງວ່າມີທາງອອກຢ່າງກະທັນຫັນໃຫ້ແກ່ການທ້າທາຍ, ແລະ ລືມໄປວ່າ ສ່ວນໃຫຍ່ຈຳເປັນຕ້ອງມີຄຸນນະທຳແຫ່ງສະຫວັນເຊິ່ງແມ່ນຄວາມອົດທົນ."*
>
> – ປະທານ ທອມມັສ ແອັສ ມອນສັນ
>
> "PATIENCE—A HEAVENLY VIRTUE," *ENSIGN*, NOV. 1995, 59

## ກິດຈະກຳ: ການສຶກສາສ່ວນຕົວ

- ໃຫ້ສຶກສາ Mosiah 28:1–9. ຄວາມປາດຖະໜາຂອງລູກຊາຍທັງຫລາຍຂອງໂມໄຊຍາແມ່ນຫຍັງ?
- ຄຳສັ່ງສອນຂອງພະຜູ້ເປັນເຈົ້າຕໍ່ຜູ້ສອນສາດສະໜາທັງຫລາຍແມ່ນຫຍັງ? (See Alma 17:10–11 and 26:27.)
- ຜົນຂອງຄວາມອົດທົນ ແລະ ຄວາມເອົາໃຈໃສ່ຂອງເຂົາເຈົ້າແມ່ນຫຍັງ? (See Alma 26.)
- ຂຽນຄຳຕອບຂອງທ່ານໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

ໝາຍເຫດ

### ການສຶກສາພະຄຳພີ

**ເປັນຫຍັງຄວາມອົດທົນຈຶ່ງເປັນສິ່ງທີ່ສຳຄັນ? ຄວາມອົດທົນ ແລະ ສັດທາກ່ຽວຂ້ອງກັນແນວໃດ?**

| | | |
|---|---|---|
| Mosiah 23:21 | ແອລະມາ 34:40–41 | 2 ໂກລິນໂທ 6:1–10 |
| Mosiah 24:9–16 | D&C 101:38 | ຢາໂກໂບ 5:10–11 |
| Alma 31:31 | ໂລມ 5:3–5 | ເພງສັນລະເສີນ 46:10 |
| ແອລະມາ 32:41–43 | ໂລມ 8:24–25 | Guide to the Scriptures, "Patience" |

## ຄວາມຖ່ອມຕົວ



ຄວາມຖ່ອມຕົວຄືຄວາມເຕັມໃຈທີ່ຈະຍອມເຮັດຕາມຄວາມປາດຖະໜາຂອງພະຜູ້ເປັນເຈົ້າ ແລະ ໃຫ້ກຽດແກ່ພະຜູ້ເປັນເຈົ້າ ສຳລັບສິ່ງທີ່ເຮັດສຳເລັດ. ມັນຮ່ວມດ້ວຍຄວາມຮູ້ບຸນຄຸນສຳລັບພອນຂອງພະອົງ ແລະ ການຮັບຮູ້ເຖິງຄວາມຕ້ອງການຢ່າງສະໝ່ຳສະເໝີຂອງທ່ານເພື່ອຄວາມຊ່ອຍເຫລືອອັນສັກສິດຂອງພະອົງ. ຄວາມຖ່ອມຕົວບໍ່ແມ່ນສັນຍາລັກຂອງຄວາມອ່ອນແອ; ມັນຄືສັນຍາລັກຂອງອຳນາດທາງວິນຍານ. ເມື່ອທ່ານໄວ້ວາງໃຈພະອົງຢ່າງຖ່ອມຕົວ ແລະ ຮັບຮູ້ອຳນາດ ແລະ ຄວາມເມດຕາຂອງພະອົງ, ແລ້ວທ່ານຈະສາມາດໝັ້ນໃຈວ່າ ພະບັນຍັດຂອງພະອົງເປັນຜົນດີຕໍ່ທ່ານ. ທ່ານຈະໝັ້ນໃຈວ່າ ທ່ານສາມາດເຮັດສິ່ງໃດກໍຕາມທີ່ພະຜູ້ເປັນເຈົ້າຕ້ອງການໃຫ້ທ່ານເຮັດຖ້າທ່ານເພິ່ງພາພະອົງ. ອີກຢ່າງໜຶ່ງ ທ່ານຈະເຕັມໃຈທີ່ຈະເຊື່ອຖືຜູ້ຮັບໃຊ້ ທີ່ພະອົງໄດ້ເລືອກ ແລະ ເຮັດຕາມຄຳແນະນຳຂອງເຂົາເຈົ້ານຳອີກ. ຄວາມຖ່ອມຕົວຈະຊ່ອຍເຫລືອທ່ານ ເມື່ອທ່ານພະຍາຍາມເຊື່ອຟັງ, ເຮັດວຽກງານຢ່າງຂະຫຍັນ ແລະ ຮັບໃຊ້ຢ່າງບໍ່ເຫັນແກ່ຕົວ.

ສິ່ງກົງກັນຂ້າມກັບຄວາມຖ່ອມຕົວຄື ຄວາມທະນົງຕົວ, ເຊິ່ງພະຄຳພີໄດ້ກ່າວປະນາມ. ຄວາມທະນົງຕົວໝາຍຄວາມວ່າເຊື່ອຖືຕົວເອງຫລາຍກວ່າພະເຈົ້າ ຫລື ຜູ້ຮັບໃຊ້ຂອງພະອົງ. ອີກຢ່າງໜຶ່ງ ໝາຍຄວາມວ່າ ຖືສິ່ງທີ່ເປັນຂອງໂລກສຳຄັນກວ່າສິ່ງທີ່ເປັນຂອງພະເຈົ້າ. ຄົນທີ່ທະນົງຕົວຈະມອບກຽດໃຫ້ຕົວເອງແທນທີ່ຈະມອບໃຫ້ລັດສະໝີພາບຂອງພະເຈົ້າ. ຄວາມທະນົງຕົວຄື ການແຂ່ງຂັນ; ຜູ້ທີ່ມີຄວາມທະນົງຕົວຈະສະແຫວງຫາ ແລະ ຄິດເອົາເອງວ່າ ຕົວເອງດີກວ່າຄົນອື່ນ. ຜົນທີ່ຕາມມາຂອງຄວາມທະນົງຕົວຄື ຄວາມຮູ້ສຶກທີ່ໂມໂຫ ແລະ ກຽດຊັງ ແລະ ມັນເປັນອຸບປະສັກອັນຍິ່ງໃຫຍ່.

### ການສຶກສາພະຄຳພີ

**ການຖ່ອມຕົວມີຄວາມໝາຍແນວໃດ?**

| | | |
|---|---|---|
| 2 ນີໄຟ 9:28–29 | ແອລະມາ 5:26–29 | ມັດທາຍ 26:39 |
| ໂມໄຊຍາ 4:11–12 | Alma 26:12 | Guide to the Scriptures, "Humble, Humility" |

**ທ່ານໄດ້ຮັບພອນອັນໃດແດ່ເມື່ອທ່ານຖ່ອມຕົວ?**

| | | |
|---|---|---|
| ແອລະມາ 32:1–16 | D&C 67:10 | ມັດທາຍ 23:12 |
| Ether 12:27 | D&C 112:10 | |
| D&C 12:8 | D&C 136:32–33 | |

**ທ່ານຈະຮູ້ຈັກຄວາມທະນົງຕົວໃນຕົວທ່ານເອງໄດ້ແນວໃດ?**

| | | |
|---|---|---|
| 1 Nephi 15:7–11 | 2 ຕີໂມທີ 3:1–4 | ສຸພາສິດ 15:10 |
| 1 ນີໄຟ 16:1–3 | ສຸພາສິດ 13:10 | ສຸພາສິດ 28:25 |

ໝາຍເຫດ

## ການເອົາໃຈໃສ່

ການເອົາໃຈໃສ່ຄືຄວາມພະຍາຍາມທີ່ໝັ້ນຄົງ, ສະໝ່ຳສະເໝີ, ຈິງຈັງ, ແລະ ມີພະລັງ ໃນການເຮັດວຽກງານຂອງພະຜູ້ເປັນເຈົ້າ. ພະຜູ້ເປັນເຈົ້າຄາດຫວັງໃຫ້ທ່ານເຮັດວຽກງານຂອງພະອົງຢ່າງເອົາໃຈໃສ່—ຢ່າງບໍ່ຍອມທໍ້ຖອຍ ແລະ ດ້ວຍຄວາມພະຍາຍາມ ແລະ ຄວາມເປັນຫ່ວງຫລາຍທີ່ສຸດ. ຜູ້ສອນສາດສະໜາທີ່ເອົາໃຈໃສ່ ຈະເຮັດວຽກງານຢ່າງໄດ້ຜົນ ແລະ ມີຄວາມສາມາດ. ການເອົາໃຈໃສ່ໃນວຽກງານເຜີຍແຜ່ຄືການສະແດງຄວາມຮັກຂອງທ່ານຕໍ່ພະຜູ້ເປັນເຈົ້າ ແລະ ວຽກງານຂອງພະອົງ. ເມື່ອທ່ານເອົາໃຈໃສ່, ທ່ານມີຄວາມປິຕິຍິນດີ ແລະ ຄວາມພໍໃຈໃນວຽກງານຂອງທ່ານ.

ໃຫ້ເຮັດຫລາຍສິ່ງຫລາຍຢ່າງດ້ວຍຄວາມສະໝັກໃຈຂອງທ່ານເອງ (see D&C 58:27). ຢ່າຖ້າຜູ້ນຳໃຫ້ບອກທ່ານສິ່ງທີ່ຈະເຮັດ. ເຮັດຕໍ່ໄປຈົນວ່າທ່ານໄດ້ເຮັດທຸກສິ່ງທີ່ທ່ານສາມາດເຮັດໄດ້, ເຖິງແມ່ນວ່າທ່ານຈະເມື່ອຍ. ໃຫ້ເອົາໃຈໃສ່ຕໍ່ສິ່ງທີ່ສຳຄັນທີ່ສຸດ ແລະ ຫລີກລ້ຽງຈາກການເສຍເວລາ. ອະທິຖານເພື່ອການນຳພາ ແລະ ພະລັງ. ວາງແຜນເປັນປະຈຳ ແລະ ຢ່າງມີຜົນ. ຫລີກລ້ຽງຈາກສິ່ງໃດກໍຕາມທີ່ລົບກວນຄວາມຄິດ ຫລື ການກະທຳຂອງທ່ານ.

*"ຂ້າພະເຈົ້າເວົ້າເລື້ອຍໆວ່າ ຄວາມລັບອັນໜຶ່ງທີ່ຍິ່ງໃຫຍ່ກ່ຽວກັບການເຜີຍແຜ່ຄືການເຮັດວຽກ! ຖ້າຜູ້ສອນ ສາດສະໜາຄົນໜຶ່ງເຮັດວຽກ, ເຂົາຈະໄດ້ຮັບພະວິນຍານ; ຖ້າເຂົາໄດ້ຮັບພະວິນຍານ, ເຂົາຈະສອນດ້ວຍ ພະວິນຍານ; ແລະ ຖ້າເຂົາສອນດ້ວຍພະວິນຍານ, ເຂົາຈະມີອິດທິພົນຕໍ່ຈິດໃຈຂອງຜູ້ຄົນ ແລະ ເຂົາຈະມີຄວາມສຸກ. ຈະບໍ່ມີຄວາມຄິດຮອດບ້ານ, ບໍ່ມີການຮ້ອນໃຈກ່ຽວກັບຄອບຄົວ, ເພາະເວລາ ແລະ ພອນສະຫວັນ ແລະ ຄວາມສົນໃຈທັງໝົດຈະຈົດຈໍ່ຢູ່ທີ່ວຽກງານຂອງການຮັບໃຊ້. ເຮັດວຽກ, ເຮັດວຽກ, ເຮັດວຽກ—ບໍ່ມີສິ່ງໃດທີ່ຈະສາມາດທົດແທນໄດ້, ໂດຍສະເພາະໃນວຽກງານເຜີຍແຜ່."*

– ປະທານ ເອສະລາ ແທັບ ເບັນສັນ

*THE TEACHINGS OF EZRA TAFT BENSON* (1988), 200

### ການສຶກສາພະຄຳພີ

**ການເອົາໃຈໃສ່ມີຄວາມໝາຍວ່າແນວໃດ?**

ໂມໂລໄນ 9:6
D&C 107:99–100
Guide to the Scriptures, "Diligence"
D&C 10:4

**ເປັນຫຍັງພະຜູ້ເປັນເຈົ້າຈຶ່ງຄາດຫວັງໃຫ້ທ່ານເປັນຄົນເອົາໃຈໃສ່?**

D&C 75:2–5
D&C 127:4
D&C 130:20–21
D&C 123:12–14

**ການເອົາໃຈໃສ່ກ່ຽວຂ້ອງນຳສິດທີ່ຈະເລືອກແນວໃດ?**

ໂມໄຊຢາ 4:26–27
D&C 58:26–29

ໝາຍເຫດ

## ການເຊື່ອຟັງ

ໃນຖານະເປັນຜູ້ສອນສາດສະໜາ, ທ່ານຖືກຄາດຫວັງໃຫ້ຮັກສາພະບັນຍັດຢ່າງເຕັມໃຈ, ເຊື່ອຟັງກົດຂອງໂຄງການເຜີຍແຜ່, ແລະ ເຮັດຕາມຄຳສັ່ງສອນຂອງຜູ້ນຳທັງຫລາຍຂອງທ່ານ. ການເຊື່ອຟັງຄືກົດທຳອິດຂອງສະຫວັນ. ມັນຄືການກະທຳຂອງສັດທາ. ບາງຄັ້ງ ທ່ານອາດຈະຕ້ອງເຮັດສິ່ງທີ່ທ່ານບໍ່ເຂົ້າໃຈທັງໝົດ. ເມື່ອທ່ານເຊື່ອຟັງ, ທ່ານຈະມີສັດທາ, ຄວາມຮູ້, ປັນຍາ, ປະຈັກພະຍານ, ການປ້ອງກັນ, ແລະ ອິດສະລະພາບຫລາຍຂຶ້ນ. ໃຫ້ພະຍາຍາມເຊື່ອຟັງພະຜູ້ເປັນເຈົ້າ, ສາດສະດາທີ່ມີຊີວິດຢູ່, ແລະ ປະທານເຜີຍແຜ່ຂອງທ່ານ.

> *"ຄວາມເອົາໃຈໃສ່ທີ່ມາຈາກການເຊື່ອຟັງປະຈຳວັນ ແລະ ການດຳລົງຊີວິດຢ່າງສະອາດ ແລະ ຊີວິດທີ່ດີງາມຈະເປັນຊຸດປ້ອງກັນຫຸ້ມຫໍ່ທ່ານ ແລະ ຮັກສາທ່ານຈາກການລໍ້ລວງທີ່ອ້ອມລ້ອມທ່ານຂະນະທີ່ທ່ານເດີນໄປໃນຊີວິດມະຕະນີ້."*
>
> – ແອວເດີ ແອວ ທອມ ແພລີ
>
> "CALLED TO SERVE," *ENSIGN*, MAY 1991, 39

### ການສຶກສາພະຄຳພີ

**ການເຊື່ອຟັງໝາຍຄວາມວ່າແນວໃດ?**

| | | |
|---|---|---|
| 1 ນີໄຟ 2:3 | D&C 82:8–10 | ໂຢຮັນ 14:15 |
| ໂມໄຊຢາ 5:8 | ມັດທາຍ 7:24–27 | Guide to the Scriptures, "Obedience, Obedient, Obey" |
| Mosiah 15:7 | ໂຢຮັນ 7:17 | |

**ທ່ານສາມາດຮຽນຮູ້ຫຍັງແດ່ກ່ຽວກັບຄວາມເຊື່ອຟັງຈາກຂໍ້ພະຄຳພີເຫລົ່ານີ້?**

| | | |
|---|---|---|
| 1 ນີໄຟ 3:7 | D&C 105:6 | 2 ກະສັດ 5:1–14 |

**ເປັນຫຍັງນັກຮົບໜຸ່ມໃນກອງທັບຂອງຮີລາມັນຈຶ່ງເຊື່ອຟັງຢ່າງທ່ຽງຕົງ? ເຂົາເຈົ້າໄດ້ຮັບພອນແນວໃດ?**

| | |
|---|---|
| Alma 56:45–48 | Alma 57:21–27 |

## ການພັດທະນາຄຸນສົມບັດໃຫ້ເປັນຄືກັນກັບພະຄິດ

ເມື່ອທ່ານສຶກສາ ແລະ ພະຍາຍາມພັດທະນາຄຸນສົມບັດທີ່ໄດ້ບັນລະຍາຍໄວ້ໃນບົດນີ້ ແລະ ຄຸນສົມບັດອື່ນໆທີ່ມີຢູ່ໃນພະຄຳພີ, ແບບແຜນດັ່ງຕໍ່ໄປນີ້ອາດຈະຊ່ອຍເຫລືອທ່ານໄດ້:

- ຊອກຫາຄຸນສົມບັດທີ່ທ່ານຢາກພັດທະນາ.
- ຂຽນຄວາມໝາຍ ແລະ ບັນລະຍາຍກ່ຽວກັບຂອງຄຸນສົມບັດນັ້ນ.
- ບັນທຶກຄຳຖາມເພື່ອຈະຕອບເມື່ອທ່ານສຶກສາ.
- ເຮັດລາຍການ ແລະ ສຶກສາຂໍ້ພະຄຳພີທີ່ສອນກ່ຽວກັບຄຸນສົມບັດນັ້ນ.
- ບັນທຶກຄວາມຮູ້ສຶກ ແລະ ຄວາມປະທັບໃຈຂອງທ່ານ.
- ຕັ້ງເປົ້າໝາຍ ແລະ ວາງແຜນເພື່ອຈະນຳໃຊ້ຄຸນສົມບັດໃນຊີວິດຂອງທ່ານ.
- ອະທິຖານເພື່ອພະຜູ້ເປັນເຈົ້າຈະຊ່ອຍເຫລືອທ່ານພັດທະນາຄຸນສົມບັດນັ້ນ.
- ປະເມີນຄວາມກ້າວໜ້າຂອງທ່ານໃນການພັດທະນາຄຸນສົມບັດແຕ່ລະວັນເປັນປະຈຳ.

ໝາຍເຫດ

## ກິດຈະກຳ: ການສຶກສາສ່ວນຕົວ

ຂອກຫາຄຸນສົມບັດຢ່າງໜຶ່ງຈາກບົດນີ້ ຫລື ຈາກພະຄຳພີ. ເຮັດຕາມແບບແຜນທີ່ມີຢູ່ຂ້າງເທິງນີ້ເພື່ອໃຫ້ເຂົ້າໃຈດີຂຶ້ນ ແລະ ເພື່ອວາງແຜນທີ່ຈະພັດທະນາຄຸນສົມບັດນັ້ນ.

ໃຫ້ເບິ່ງປ້າຍຊື່. ປ້າຍຊື່ຂອງທ່ານແຕກຕ່າງຈາກປ້າຍຊື່ຂອງລູກຈ້າງຂອງບໍລິສັດແນວໃດ? ໃຫ້ສັງເກດເບິ່ງວ່າ ສ່ວນສຳຄັນທີ່ສຸດຄື ຊື່ຂອງທ່ານ ແລະ ພະນາມຂອງພຣະຜູ້ຊ່ອຍໃຫ້ລອດ. ທ່ານຈະສາມາດຮັບປະກັນວ່າ ທ່ານເປັນຕົວແທນຂອງພຣະຜູ້ຊ່ອຍໃຫ້ລອດ ໃນຖານະເປັນສານຸສິດຄົນໜຶ່ງຂອງພຣະອົງໄດ້ແນວໃດ? ເປັນຫຍັງຈຶ່ງເປັນສິ່ງສຳຄັນທີ່ຜູ້ຄົນຈະພົວພັນຊື່ຂອງທ່ານນຳພະນາມຂອງພຣະຜູ້ຊ່ອຍໃຫ້ລອດໃນທາງທີ່ດີ? ຂຽນຄວາມຄິດຂອງທ່ານໄວ້ໃນປື້ມບັນທຶກການສຶກສາຂອງທ່ານ.




## ການສຶກສາພະຄຳພີ

### ມີຄຸນສົມບັດອັນໃດແດ່ທີ່ບົ່ງໄວ້ຢູ່ໃນພະຄຳພີ?

| | | |
|---|---|---|
| ໂມໄຊຢາ 3:19 | D&C 121:41–45 | 2 ເປໂຕ 1:5–8 |
| Alma 7:23 | ຫລັກແຫ່ງຄວາມເຊື່ອ 1:13 | |
| D&C 4 | ຟີລິບປອຍ 4:8 | |

## ໃຫ້ຈື່ຈຳສິ່ງນີ້

- ທ່ານຕ້ອງ *ເປັນ* ຜູ້ສອນສາດສະໜາທີ່ຄືກັນກັບພຣະຄຣິດ, ບໍ່ແມ່ນພຽງແຕ່ *ເຮັດ* ສິ່ງທີ່ຜູ້ສອນສາດສະໜາເຮັດເທົ່ານັ້ນ.
- ການຮຽນຮູ້ໃຫ້ເປັນຄືກັນກັບພຣະຄຣິດ ເປັນການກະທຳທີ່ຕ້ອງເຮັດຕະຫລອດຊີວິດ.
- ທ່ານເຮັດຕາມຕົວຢ່າງຂອງພຣະຄຣິດ—ພັດທະນາຄຸນສົມບັດຂອງພຣະອົງ—ເທື່ອລະການກະທຳໜຶ່ງ ແລະ ການຕັດສິນໃຈໜຶ່ງໄປ.
- ການປ່ຽນແປງໃຫ້ເປັນຄືກັນກັບພຣະຄຣິດຈຳເປັນຕ້ອງໃຊ້ສັດທາ, ການກັບໃຈ, ການຮັກສາພັນທະສັນຍາ, ການຮັບພຣະວິນຍານບໍລິສຸດໃຫ້ຫລາຍຂຶ້ນ, ແລະ ການອົດທົນຈົນເຖິງທີ່ສຸດ.

# ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

## ການສຶກສາສ່ວນຕົວ

- ຕຽມຄຳເວົ້າຫ້ານາທີກ່ຽວກັບຄຸນສົມບັດຢ່າງໜຶ່ງທີ່ໄດ້ຖືກບັນລະຍາຍໃນບົດນີ້.

- ໂດຍການໃຊ້ Guide to the Scriptures, ໃຫ້ຊອກຫາແບບຢ່າງທີ່ພະຜູ້ຊ່ອຍໃຫ້ລອດໄດ້ເປັນຕົວຢ່າງຂອງຄຸນສົມບັດທີ່ໄດ້ຖືກບັນລະຍາຍໃນບົດນີ້. ບັນທຶກສິ່ງທີ່ທ່ານຮຽນມາໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

- ໃຫ້ໝາຍໃບ "ກິດຈະກຳກ່ຽວກັບຄຸນສົມບັດ" ໃນທ້າຍບົດນີ້ ເປັນລະຍະ ລະຍະ.

- ຊອກຫາຄຸນສົມບັດໃນບົດນີ້. ຖາມຕົວເອງວ່າ:
  - ເຮົາຈະສາມາດພັດທະນາຄຸນສົມບັດນີ້ໄດ້ແນວໃດ?
  - ເຮົາຕ້ອງປ່ຽນແປງຫຍັງແດ່ ໃນຈິດໃຈ, ສະໝອງ, ແລະ ການກະທຳຂອງເຮົາ ເພື່ອຈະພັດທະນາຄຸນສົມບັດນີ້?
  - ການຮັກສາພັນທະສັນຍາຈະຊ່ອຍເຫລືອເຮົາພັດທະນາຄຸນສົມບັດນີ້ໄດ້ແນວໃດ?
  - ການພັດທະນາຄຸນສົມບັດນີ້ຈະຊ່ອຍເຫລືອເຮົາໃຫ້ມີຄ່າຄວນສຳລັບພະວິນຍານບໍລິສຸດ ແລະ ກາຍເປັນຜູ້ສອນພະກິດຕິຄຸນຂອງພະເຢຊູຄິດທີ່ມີພະລັງຫລາຍຂຶ້ນໄດ້ແນວໃດ?

- ຊອກຫາຕົວຢ່າງຂອງຄຸນສົມບັດໃຫ້ເປັນຄືກັນກັບພະຄິດໃນຊີວິດຂອງຊາຍ ແລະ ຍິງໃນພະຄຳພີ. ບັນທຶກສິ່ງທີ່ທ່ານຮຽນມາໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

## ການສຶກສາກັບຄູ່ສອນສາດສະໜາ

- ສຶກສາຂໍ້ອ້າງອີງກ່ຽວກັບຄຸນສົມບັດໃຫ້ເປັນຄືກັນກັບພະຄິດ ທີ່ມີຢູ່ໃນອຸບປະກອນສຳລັບຜູ້ສອນສາດສະໜາ.

- ສົນທະນາເຖິງຄວາມສຳພັນລະຫວ່າງຄຸນສົມບັດອື່ນໆ. ດັ່ງເຊັ່ນ:
  - ສັດທາກ່ຽວຂ້ອງກັບການເອົາໃຈໃສ່ແນວໃດ?
  - ຄວາມຖ່ອມຕົວ ແລະ ຄວາມຮັກກ່ຽວຂ້ອງກັນດ້ວຍວິທີໃດ?
  - ຄວາມຮູ້ເພີ່ມຄວາມເຂັ້ມແຂງໃຫ້ແກ່ຄວາມອົດທົນໄດ້ແນວໃດ?

## ການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດ

- ຫລາຍມື້ກ່ອນມີການປະຊຸມທ້ອງຖິ່ນ ຫລື ກອງປະຊຸມເຂດ, ຂໍໃຫ້ຜູ້ສອນສາດສະໜາແຕ່ລະຄົນ ເລືອກຄຸນສົມບັດຢ່າງໜຶ່ງໃນບົດນີ້ ຫລື ໃນພະຄຳພີ ແລະ ຕຽມຄຳເວົ້າຫ້ານາທີກ່ຽວກັບຄຸນສົມບັດນັ້ນ, ຮ່ວມດ້ວຍຂໍ້ພະຄຳພີທີ່ໄດ້ຊ່ອຍເຂົາເຈົ້າ.

  ໃຫ້ເວລາພຽງພໍໃນການປະຊຸມເພື່ອຜູ້ສອນສາດສະໜາສອງສາມຄົນຈະໄດ້ແບ່ງປັນຄຳເວົ້າຂອງເຂົາເຈົ້າ.

- ແຍກຜູ້ສອນສາດສະໜາທັງຫລາຍໃຫ້ເປັນສາມກຸ່ມ, ແລະ ມອບໝາຍສິ່ງດັ່ງຕໍ່ໄປນີ້ໃຫ້ແຕ່ລະກຸ່ມ:

  *ກຸ່ມ 1:* ອ່ານ 1 ນີໄຟ 17:7–16 ແລະ ຕອບຄຳຖາມດັ່ງຕໍ່ໄປນີ້:
  - ນີໄຟໄດ້ໃຊ້ສັດທາຂອງເພິ່ນແນວໃດ?

ໝາຍເຫດ

ໝາຍເຫດ

– ນີໄຟເຮັດຫຍັງແດ່ທີ່ເປັນຄືກັນກັບພຣະຄຣິດ?
– ພຣະຜູ້ເປັນເຈົ້າໄດ້ເຮັດຄຳສັນຍາອັນໃດແດ່ຕໍ່ ນີໄຟ ຖ້າເພິ່ນສັດຊື່ ແລະ ຮັກສາພຣະບັນຍັດ?
– ເລື່ອງນີ້ໃຊ້ກັບການເຜີຍແຜ່ໄດ້ແນວໃດ?

*ກຸ່ມ 2:* ອ່ານ Jacob 7:1–15 *ແລະ ຕອບຄຳຖາມດັ່ງຕໍ່ໄປນີ້:*

– ເປັນຫຍັງສັດທາຂອງ ຢາໂຄບ ຈຶ່ງເຂັ້ມແຂງພຽງພໍທີ່ຈະຕໍ່ຕ້ານການໂຈມຕີຂອງ ເຊເລມ?
– ຢາໂຄບ ໄດ້ໃຊ້ສັດທາແນວໃດແດ່ ເມື່ອເພິ່ນເວົ້າກັບ ເຊເລມ?
– ການກະທຳຂອງ ຢາໂຄບ ເປັນຄືກັນກັບພຣະຄຣິດແນວໃດ?
– ເຮົາສາມາດເຮັດຫຍັງແດ່ເພື່ອຈະພັດທະນາສັດທາໃຫ້ເປັນຄືກັນກັບ ຢາໂຄບ?

*ກຸ່ມ 3:* ອ່ານ Joseph Smith—History 1:8–18, ແລະ ຕອບຄຳຖາມດັ່ງຕໍ່ໄປນີ້:

– ໂຢເຊັບ ສະມິດ ໃຊ້ສັດທາໃນພຣະເຢຊູຄຣິດໃນວິທີໃດ?
– ສັດທາຂອງເພິ່ນໄດ້ຖືກທົດສອບແນວໃດ?
– ເພິ່ນເຮັດຫຍັງແດ່ທີ່ເປັນຄືກັນກັບພຣະຄຣິດ?
– ເຮົາສາມາດເຮັດຫຍັງແດ່ເພື່ອຈະເຮັດຕາມຕົວຢ່າງຂອງ ໂຢເຊັບ ສະມິດ ໄດ້?

ຫລັງຈາກທຸກກຸ່ມເຮັດແລ້ວ, ໃຫ້ຮວບຮວມຜູ້ສອນສາດສະໜາຄືນຄືເກົ່າ ແລະ ຂໍໃຫ້ເຂົາເຈົ້າແບ່ງປັນສິ່ງທີ່ເຂົາເຈົ້າໄດ້ສົນທະນາ.

- ແບ່ງປັນປະສົບການອັນໜຶ່ງ ຕອນທ່ານໄດ້ຮັບພອນ ຫລື ຮັບການເປີດເຜີຍຜ່ານສັດທາຂອງຄົນອື່ນ.

- ໃຫ້ຜູ້ສອນສາດສະໜາເປີດໄປຫາ "ກິດຈະກຳກ່ຽວກັບຄຸນສົມບັດ." ເອົາເຈ້ຍໃບໜຶ່ງໃຫ້ເຂົາເຈົ້າເພື່ອຂຽນຄຳຕອບຂອງເຂົາເຈົ້າໃສ່.

  ເມື່ອເຂົາເຈົ້າຂຽນແລ້ວ, ເຊື້ອເຊີນເຂົາເຈົ້າໃຫ້ຕັ້ງເປົ້າໝາຍສ່ວນຕົວ.

  ຂໍໃຫ້ຜູ້ສອນສາດສະໜາສອງສາມຄົນແບ່ງປັນສິ່ງທີ່ເຂົາເຈົ້າໄດ້ຮຽນມາ ແລະ ໄດ້ຮູ້ສຶກເມື່ອເຂົາເຈົ້າຂຽນແລ້ວ.

  ສະແດງປະຈັກພະຍານຂອງທ່ານກ່ຽວກັບຄວາມສຳຄັນທີ່ຈະພັດທະນາຄຸນສົມບັດໃຫ້ເປັນຄືກັນກັບພຣະຄຣິດ.

## ປະທານເຜີຍແຜ່

- ຂໍໃຫ້ຜູ້ສອນສາດສະໜາອ່ານໜຶ່ງໃນພຣະທຳສີ່ເຫລັ້ມທຳອິດ ໃນພຣະຄຳພີໃໝ່ ຫລື 3 ນີໄຟ 11–28. ໃຫ້ເຂົາເຈົ້າຂີດເສັ້ນໃສ່ກ້ອງສິ່ງທີ່ພຣະຜູ້ຊ່ອຍໃຫ້ລອດໄດ້ເຮັດ ທີ່ເຂົາເຈົ້າສາມາດເຮັດໄດ້ຄືກັນ.

- ໃຊ້ການຕັ້ງເປົ້າໝາຍ ແລະ ການວາງແຜນ ເພື່ອສອນຜູ້ສອນສາດສະໜາກ່ຽວກັບການເອົາໃຈໃສ່. ສະແດງໃຫ້ເຫັນວ່າ ການເອົາໃຈໃສ່ຕໍ່ຜູ້ຄົນ ແມ່ນການສະແດງເຖິງຄວາມຮັກແນວໃດ.

- ລະຫວ່າງການສຳພາດ, ຂໍໃຫ້ຜູ້ສອນສາດສະໜາບອກກ່ຽວກັບຄຸນສົມບັດທີ່ເຂົາເຈົ້າກຳລັງພະຍາຍາມພັດທະນາ.

- ໃນກອງປະຊຸມເຂດ, ໃຫ້ເຊື້ອເຊີນຜູ້ສອນສາດສະໜາທັງຫລາຍບອກກ່ຽວກັບຄຸນສົມບັດທີ່ເປັນຄືກັນກັບພຣະຄຣິດ ທີ່ເຂົາເຈົ້າຍ້ອງຍໍຊົມເຊີຍໃນຄູ່ສອນສາດສະໜາຂອງຕົນ.

# ກິດຈະກຳກ່ຽວກັບຄຸນສົມບັດ

ອ່ານແຕ່ລະຂໍ້ທີ່ມີຢູ່ຂ້າງລຸ່ມນີ້ຢ່າງລະມັດລະວັງ. ຕັດສິນໃຈວ່າ ຂໍ້ຄວາມເຫລົ່ານັ້ນເປັນຄວາມຈິງພຽງໃດກ່ຽວກັບທ່ານ, ແລະ ໃຫ້ເລືອກຄຳຕອບທີ່ເໝາະສົມທີ່ສຸດຈາກຕາຕະລາງຄຳຕອບ. ຂຽນຄຳຕອບແຕ່ລະຂໍ້ໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ. ການເຕີບໂຕທາງວິນຍານແມ່ນຂັ້ນຕອນທີ່ເຮັດເທື່ອລະເລັກ ເທື່ອລະນ້ອຍ, ແລະ ບໍ່ມີໃຜທີ່ເປັນຄົນດີພ້ອມ, ສະນັ້ນ ທ່ານຄວນໃຫ້ຄະແນນຕົວເອງໃນບາງຂໍ້ດີກວ່າຂໍ້ອື່ນໆ.

ຕາຕະລາງຄຳຕອບ 1 = ບໍ່ເຄີຍ 2 = ບາງຄັ້ງ 3 = ສ່ວນຫລາຍ 4 = ເກືອບເລື້ອຍໆ 5 = ເລື້ອຍໆ

## ສັດທາ

____ 1. ເຮົາເຊື່ອໃນພະຄຣິດ ແລະ ຍອມຮັບພະອົງເປັນພະຜູ້ຊ່ອຍໃຫ້ລອດຂອງເຮົາ. (2 Nephi 25:29)

____ 2. ເຮົາຮູ້ສຶກໝັ້ນໃຈວ່າພະເຈົ້າຮັກເຮົາ. (1 Nephi 11:17)

____ 3. ເຮົາໄວ້ວາງໃຈໃນພະຜູ້ຊ່ອຍໃຫ້ລອດພຽງພໍທີ່ຈະຍອມຮັບຄວາມປາດຖະໜາຂອງພະອົງ ແລະ ຈະເຮັດສິ່ງໃດກໍຕາມທີ່ພະອົງຂໍໃຫ້ເຮົາເຮັດ. (1 ນີໄຟ 3:7)

____ 4. ເຮົາເຊື່ອຢ່າງເຂັ້ມແຂງວ່າ ຜ່ານການຊົດໃຊ້ຂອງພະເຢຊູຄຣິດ ເຮົາສາມາດຮັບການໃຫ້ອະໄພຈາກບາບທັງໝົດຂອງເຮົາໄດ້. (ອີນັດ 1:5–8)

____ 5. ເຮົາມີສັດທາໃນພະຄຣິດພຽງພໍທີ່ຈະຮັບຄຳຕອບຕໍ່ຄຳອະທິຖານຂອງເຮົາ. (Mosiah 27:14)

____ 6. ເຮົາຄິດເຖິງພະຜູ້ຊ່ອຍໃຫ້ລອດຕະຫລອດທັງວັນ ແລະ ຈື່ຈຳສິ່ງທີ່ພະອົງໄດ້ເຮັດເພື່ອເຮົາ. (D&C 20:77, 79)

____ 7. ເຮົາມີສັດທາພຽງພໍທີ່ຈະຊ່ອຍເຮັດໃຫ້ສິ່ງທີ່ດີເກີດຂຶ້ນໃນຊີວິດຂອງເຮົາ ຫລື ໃນຊີວິດຂອງຄົນອື່ນໆ. (Ether 12:12)

____ 8. ເຮົາຮູ້ໂດຍອຳນາດຂອງພະວິນຍານບໍລິສຸດວ່າພະຄຳພີມໍມອນແມ່ນຄວາມຈິງ. (ໂມໂລໄນ 10:3–5)

____ 9. ເຮົາມີສັດທາໃນພະຄຣິດພຽງພໍທີ່ຈະເຮັດສິ່ງໃດກໍຕາມທີ່ພະອົງຢາກໃຫ້ເຮົາເຮັດໃຫ້ສຳເລັດ—ຮ່ວມດ້ວຍສິ່ງມະຫັດສະຈັນ, ຖ້າຈຳເປັນ. (ໂມໂລໄນ 7:33)

## ຄວາມຫວັງ

____ 10. ຄວາມປາດຖະໜາຢ່າງໜຶ່ງທີ່ຍິ່ງໃຫຍ່ທີ່ສຸດຂອງເຮົາຄື ການໄດ້ຮັບຊີວິດນິລັນດອນໃນອານາຈັກຊັ້ນສູງຂອງພະເຈົ້າ. (ໂມໂລໄນ 7:41)

____ 11. ເຮົາໝັ້ນໃຈວ່າເຮົາຈະເປັນຜູ້ສອນສາດສະໜາທີ່ມີຄວາມສຸກ ແລະ ມີຜົນສຳເລັດ. (D&C 31:3–5)

____ 12. ເຮົາຮູ້ສຶກສະຫງົບ ແລະ ເບິ່ງໂລກໃນແງ່ດີກ່ຽວກັບອະນາຄົດ. (D&C 59:23)

____ 13. ເຮົາເຊື່ອແທ້ໆວ່າ ມື້ໜຶ່ງເຮົາຈະໄດ້ຢູ່ກັບພະເຈົ້າ ແລະ ກາຍເປັນເໝືອນດັ່ງພະອົງ. (Ether 12:4)

## ຄວາມໃຈບຸນ ແລະ ຄວາມຮັກ

____ 14. ເຮົາຮູ້ສຶກມີຄວາມປາດຖະໜາທີ່ຈິງໃຈຕໍ່ສະຫວັດດີການນິລັນດອນ ແລະ ຄວາມສຸກຂອງຄົນອື່ນ. (Mosiah 28:3)

____ 15. ເມື່ອເຮົາອະທິຖານ, ເຮົາຮ້ອງຂໍເພື່ອຄວາມໃຈບຸນ—ຊຶ່ງແມ່ນຄວາມຮັກອັນບໍລິສຸດຂອງພະຄຣິດ. (ໂມໂລໄນ 7:47–48)

____ 16. ເຮົາພະຍາຍາມເຂົ້າໃຈຄວາມຮູ້ສຶກຂອງຄົນອື່ນໆ ແລະ ເຫັນທັດສະນະຂອງເຂົາເຈົ້າ. (ຢູດາ 1:22)

____ 17. ເຮົາໃຫ້ອະໄພແກ່ຄົນອື່ນໆທີ່ໄດ້ເຮັດຜິດຕໍ່ເຮົາ. (ເອເຟໂຊ 4:32)

____ 18. ເຮົາພະຍາຍາມຊ່ອຍເຫລືອຄົນອື່ນໆເມື່ອເຂົາເຈົ້າກຳລັງດີ້ນລົນ ຫລື ທໍ້ຖອຍໃຈ. (ໂມໄຊຢາ 18:9)

____ 19. ເມື່ອເວລາເໝາະສົມ, ເຮົາບອກຄົນອື່ນວ່າເຮົາຮັກເຂົາເຈົ້າ ແລະ ເປັນຫ່ວງນຳເຂົາເຈົ້າ. (ລູກາ 7:12–15)

____ 20. ເຮົາຊອກຫາໂອກາດເພື່ອຈະຮັບໃຊ້ຄົນອື່ນ. (ໂມໄຊຢາ 2:17)

____ 21. ເຮົາເວົ້າສິ່ງທີ່ດີກ່ຽວກັບຄົນອື່ນໆ. (D&C 42:27)

____ 22. ເຮົາມີເມດຕາ ແລະ ອົດທົນກັບຄົນອື່ນໆ, ເຖິງແມ່ນວ່າເຂົາເຈົ້າເປັນຄົນເອົາໃຈຍາກ. (ໂມໂລໄນ 7:45)

____ 23. ເຮົາມີຄວາມປິຕິຍິນດີເມື່ອຄົນອື່ນໆໄດ້ຮັບຜົນສຳເລັດ. (Alma 17:2–4)

## ຄວາມດີ

____ 24. ຈິດໃຈຂອງເຮົາສະອາດ ແລະ ບໍລິສຸດ. (ເພງສັນລະເສີນ 24:3–4)

____ 25. ເຮົາບໍ່ມີຄວາມປາດຖະໜາທີ່ຈະເຮັດສິ່ງທີ່ຊົ່ວແຕ່ເຮັດສິ່ງທີ່ດີ. (ໂມໄຊຢາ 5:2)

____ 26. ເຮົາເປັນຄົນອາໄສໄດ້—ເຮົາເຮັດສິ່ງທີ່ເຮົາເວົ້າວ່າເຮົາຈະເຮັດ. (Alma 53:20)

____ 27. ເຮົາຕັ້ງໃຈໃສ່ຕໍ່ຄວາມຄິດທີ່ຊອບທຳ ແລະ ເຮັດໃຫ້ເບີກບານ ແລະ ກຳຈັດຄວາມຄິດທີ່ບໍ່ດີອອກຈາກສະໝອງຂອງເຮົາ. (D&C 121:45)

____ 28. ເຮົາກັບໃຈຈາກບາບຂອງເຮົາ ແລະ ພະຍາຍາມເອົາຊະນະຄວາມອ່ອນແອຂອງເຮົາ. (D&C 49:226–28)

____ 29. ເຮົາຮູ້ສຶກເຖິງອິດທິພົນຂອງພະວິນຍານບໍລິສຸດໃນຊີວິດຂອງເຮົາ. (D&C 11:12–13)

## ຄວາມຮູ້

____ 30. ເຮົາຮູ້ສຶກໝັ້ນໃຈໃນຄວາມເຂົ້າໃຈຂອງເຮົາກ່ຽວກັບຄຳສອນ ແລະ ຫລັກທຳແຫ່ງພະກິດຕິຄຸນ. (Ether 3:19–20)

____ 31. ເຮົາສຶກສາພະຄຳພີທຸກໆວັນ. (ໂຢຮັນ 5:39)

____ 32. ເຮົາສະແຫວງຫາຢ່າງເອົາໃຈໃສ່ເພື່ອຈະໄດ້ເຂົ້າໃຈຄວາມຈິງ ແລະ ໄດ້ຮັບຄຳຕອບຕໍ່ຄຳຖາມຂອງເຮົາ. (D&C 6:7)

____ 33. ເຮົາໄດ້ຮັບຄວາມຮູ້ ແລະ ການນຳພາຜ່ານພະວິນຍານ. (1 ນີໄຟ 4:6)

____ 34. ເຮົາຮັກ ແລະ ຖະໜອມຄຳສອນ ແລະ ຫລັກທຳແຫ່ງພະກິດຕິຄຸນ. (2 ນີໄຟ 4:15)

## ຄວາມອົດທົນ

____ 35. ເຮົາຖ້າຢ່າງມີຄວາມອົດທົນສຳລັບພອນ ແລະ ຄຳສັນຍາຂອງພະຜູ້ເປັນເຈົ້າຈົນກວ່າມັນຈະເກີດຂຶ້ນ. (2 Nephi 10:17)

____ 36. ເຮົາສາມາດຖ້າສິ່ງຕ່າງໆປາດສະຈາກຄວາມໃຈຮ້າຍ ຫລື ທໍ້ຖອຍໃຈ. (ໂລມ 8:25)

____ 37. ເຮົາອົດທົດຕໍ່ການທ້າທາຍທີ່ກ່ຽວຂ້ອງນຳການເປັນຜູ້ສອນສາດສະໜາ. (Alma 17:11)

____ 38. ເຮົາອົດທົນຕໍ່ຄວາມຜິດ ແລະ ຄວາມອ່ອນແອຂອງຄົນອື່ນໆ. (ໂລມ 15:1)

____ 39. ເຮົາອົດທົນນຳຕົວເອງ ແລະ ເພິ່ງພະຜູ້ເປັນເຈົ້າເມື່ອເຮົາພະຍາຍາມເອົາຊະນະຄວາມອ່ອນແອຂອງເຮົາ. (Ether 12:27)

____ 40. ເຮົາສູ້ໜ້າຕໍ່ຄວາມລຳບາກ ແລະ ຄວາມທຸກທໍລະມານຢ່າງໃຈເຢັນ ແລະ ດ້ວຍຄວາມຫວັງ. (ແອລະມາ 34:40–41)

## ຄວາມຖ່ອມຕົວ

____ 41. ເຮົາມີໃຈສຸພາບ ແລະ ອ່ອນຫວານ. (ມັດທາຍ 11:29)

____ 42. ເຮົາເພິ່ງພະຜູ້ເປັນເຈົ້າໃຫ້ຊ່ອຍເຫລືອ. (Alma 26:12)

____ 43. ເຮົາມີຄວາມຮູ້ບຸນຄຸນຢ່າງຈິງໃຈສຳລັບພອນທັງຫລາຍທີ່ເຮົາໄດ້ຮັບຈາກພະຜູ້ເປັນເຈົ້າ. (Alma 7:23)

____ 44. ເຮົາອະທິຖານຢ່າງເອົາໃຈໃສ່ ແລະ ຈິງໃຈ. (ອີນັດ 1:4)

____ 45. ເຮົາຮູ້ບຸນຄຸນສຳລັບການນຳພາຈາກຜູ້ນຳ ຫລື ຄູຂອງເຮົາ. (2 ນີໄຟ 9:28)

____ 46. ເຮົາພະຍາຍາມຍອມຕໍ່ຄວາມປາດຖະໜາຂອງພະຜູ້ເປັນເຈົ້າ, ບໍ່ວ່າຈະເປັນຢ່າງໃດກໍຕາມ. (Mosiah 24:15)

## ການເອົາໃຈໃສ່

____ 47. ເຮົາເຮັດວຽກງານໃຫ້ມີຜົນ, ເຖິງແມ່ນຕອນເຮົາບໍ່ມີຄວາມກົດດັນ ຫລື ໄດ້ຮັບການຄວບຄຸມຢ່າງໃກ້ຊິດ. (D&C 58:26–27)

____ 48. ເຮົາຕັ້ງໃຈໃສ່ຕໍ່ຄວາມພະຍາຍາມຂອງເຮົາໃນສິ່ງທີ່ສຳຄັນທີ່ສຸດ. (ມັດທາຍ 23:23)

____ 49. ເຮົາອະທິຖານເປັນສ່ວນຕົວຢ່າງໜ້ອຍທີ່ສຸດມື້ໜຶ່ງສອງເທື່ອ. (ແອລະມາ 34:18–27)

____ 50. ເຮົາສຸມແນວຄິດຕໍ່ການເອີ້ນຂອງເຮົາໃນຖານະເປັນຜູ້ສອນສາດສະໜາ. (D&C 4:2, 5)

____ 51. ເຮົາຕັ້ງເປົ້າໝາຍ ແລະ ວາງແຜນເປັນປະຈຳ. (D&C 88:119)

____ 52. ເຮົາເຮັດວຽກງານຢ່າງແຂງຂັນຈົນວຽກງານປະສົບຜົນສຳເລັດ. (D&C 10:4)

____ 53. ເຮົາມີຄວາມປິຕິຍິນດີ ແລະ ຄວາມພໍໃຈໃນວຽກງານຂອງເຮົາ. (Alma 36:24–25)

## ການເຊື່ອຟັງ

____ 54. ເມື່ອເຮົາອະທິຖານ, ເຮົາຮ້ອງຂໍເພື່ອໃຫ້ມີຄວາມເຂັ້ມແຂງທີ່ຈະຕໍ່ຕ້ານການລໍ້ລວງ ແລະ ເຮັດສິ່ງທີ່ຖືກຕ້ອງ. (3 ນີໄຟ 18:15)

____ 55. ເຮົາຮັກສາພະບັນຍັດທີ່ຈຳເປັນເພື່ອຈະມີຄ່າຄວນສຳລັບໃບຮັບຮອງເຂົ້າພະວິຫານ (D&C 97:8)

____ 56. ເຮົາຮັກສາກົດຂອງໂຄງການເຜີຍແຜ່ ແລະ ເຮັດຕາມຄຳສັ່ງສອນຂອງຜູ້ນຳຂອງເຮົາຢ່າງເຕັມໃຈ. (ເຮັບເລີ 13:17)

____ 57. ເຮົາພະຍາຍາມດຳລົງຊີວິດຕາມກົດ ແລະ ຫລັກທຳແຫ່ງພະກິດຕິຄຸນ. (D&C 41:5)

ໝາຍເຫດ



# ເຮົາຈະສາມາດຮຽນຮູ້ພາສາຂອງເຂດເຜີຍແຜ່ໃຫ້ດີຂຶ້ນໄດ້ແນວໃດ?

ໝາຍເຫດ

## ໃຫ້ພິຈາລະນາເລື່ອງນີ້

- ເປັນຫຍັງເຮົາຕ້ອງພັດທະນາຄວາມຊຳນານທາງພາສາຂອງເຮົາຕໍ່ໄປເລື້ອຍໆ?
- ເຮົາຈະສາມາດພັດທະນາຄວາມຊຳນານໃນການເວົ້າ ແລະ ສອນເປັນພາສາຂອງເຂດເຜີຍແຜ່ຂອງເຮົາໄດ້ແນວໃດ?
- ເຮົາຈະສາມາດຮັບຂອງປະທານແຫ່ງການເວົ້າພາສາໄດ້ແນວໃດ?

## ຈົ່ງຕຽມຕົວທ່ານເອງທາງວິນຍານ

ພຣະຜູ້ເປັນເຈົ້າໄດ້ກ່າວວ່າ, "ມະນຸດທຸກຄົນຈະໄດ້ຍິນຄວາມສົມບູນຂອງພຣະກິດຕິຄຸນໃນຄຳເວົ້າຂອງເຂົາເອງ, ແລະ ໃນພາສາຂອງເຂົາເອງ, ໂດຍທາງຄົນທີ່ໄດ້ຖືກແຕ່ງຕັ້ງໄວ້ກັບອຳນາດນີ້" (see D&C 90:11). ຈົ່ງເຮັດໃຫ້ປະຈັກພະຍານສ່ວນຕົວຂອງທ່ານເຂັ້ມແຂງຂຶ້ນເພື່ອຈະນຳເອົາພະລັງທີ່ຈະປ່ຽນແປງໃຈມາສູ່ຄຳເວົ້າຂອງທ່ານ. ທຳອິດໃຫ້ສຶກສາຄຳສອນ ແລະ ບົດຮຽນເປັນພາສາຂອງທ່ານເອງ. ຄວາມເຂົ້າໃຈນັ້ນຈະເຮັດໃຫ້ປະຈັກພະຍານ ແລະ ຄວາມສາມາດທີ່ຈະສອນ ແລະ ເປັນພະຍານດ້ວຍຄວາມໝັ້ນໃຈຂອງທ່ານເຂັ້ມແຂງຂຶ້ນ. ແລ້ວທ່ານຈະສາມາດຮຽນສະແດງຂ່າວສານຂອງການຟື້ນຟູອອກມາໃນພາສາຂອງເຂດເຜີຍແຜ່ຂອງທ່ານພາຍໃຕ້ການນຳພາຂອງພຣະວິນຍານ.

ຂ້າງລຸ່ມນີ້ຄືວິທີທີ່ທ່ານຈະສາມາດເພີ່ມສັດທາຂອງທ່ານວ່າພຣະຜູ້ເປັນເຈົ້າຈະຊ່ອຍທ່ານສອນ ແລະ ເປັນພະຍານເປັນພາສາຂອງເຂດເຜີຍແຜ່ຂອງທ່ານ:

- ຈົ່ງຮັບຮູ້ວ່າທ່ານໄດ້ຖືກເອີ້ນຈາກພຣະເຈົ້າຜ່ານທາງສາດສະດາ.
- ຈົ່ງດຳລົງຊີວິດໃຫ້ມີຄ່າຄວນເພື່ອຈະໄດ້ມີພຣະວິນຍານບໍລິສຸດສະຖິດຢູ່ນຳ.
- ຈົ່ງເຊື່ອຟັງພຣະບັນຍັດ ແລະ ມາດຕະຖານຂອງຜູ້ສອນສາດສະໜາ.

ຄຳອະທິບາຍພາບ ຮູບ: GettyImages.com. ຫ້າມລອກແບບຫ້າມຜັດ.

ໝາຍເຫດ

- ຈົ່ງອະທິຖານຂໍຄວາມຊ່ອຍເຫລືອຈາກສະຫວັນດ້ວຍຄວາມຈິງໃຈ.
- ຈົ່ງສຶກສາ, ຝຶກຫັດ, ແລະ ໃຊ້ພາສາຂອງເຂດເຜີຍແຜ່ຂອງທ່ານແຕ່ລະວັນ.

## ຈົ່ງອຸທິດຕົນ ແລະ ພາກພຽນ

ການຮຽນທີ່ຈະສອນຢ່າງໄດ້ຜົນໃນພາສາຂອງເຂດເຜີຍແຜ່ຂອງທ່ານ ຈະຕ້ອງມີຄວາມພາກພຽນພະຍາຍາມ. ບໍ່ຕ້ອງຕົກໃຈຖ້າຫາກໜ້າທີ່ເບິ່ງຄືວ່າຍາກໃນຕອນຕົ້ນ. ການຮຽນພາສາຕ້ອງໃຊ້ເວລາ. ຈົ່ງອົດທົນນຳຕົນເອງ. ຈົ່ງຊອກຫາຄວາມຊ່ອຍເຫລືອຈາກຄູ່ສອນສາດສະໜາຂອງທ່ານ, ຈາກສະມາຊິກ, ຈາກຜູ້ສົນໃຈ, ແລະ ຈາກຜູ້ສອນສາດສະໜາຄົນອື່ນໆ.

ຢ່າເຊົາພັດທະນາຄວາມຊຳນານທາງພາສາຂອງທ່ານຫລັງຈາກຄົນເລີ່ມເຂົ້າໃຈທ່ານໄດ້. ເມື່ອຄວາມຊຳນານໃນການເວົ້າພາສາຂອງທ່ານເລີ່ມດີຂຶ້ນ, ຄົນຈະຟັງສິ່ງທີ່ທ່ານເວົ້າອອກມາຫລາຍກວ່າວິທີທີ່ທ່ານເວົ້າ. ທ່ານຈະບໍ່ເປັນຫ່ວງນຳວິທີທີ່ສະແດງຄວາມຮູ້ສຶກທີ່ຢູ່ໃນຫົວໃຈຂອງທ່ານອອກມາ. ທ່ານຈະສາມາດຕອບສະໜອງຄວາມຕ້ອງການຂອງຜູ້ສົນໃຈ ແລະ ການກະຕຸ້ນຂອງພະວິນຍານດີຂຶ້ນ.

ໃຫ້ພະຍາຍາມຮຽນພາສາໃຫ້ເກັ່ງຫລາຍຂຶ້ນໃນລະຍະທີ່ທ່ານເປັນຜູ້ສອນສາດສະໜາ ແລະ ຫລັງຈາກທ່ານກັບບ້ານແລ້ວ. ພະຜູ້ເປັນເຈົ້າໄດ້ປະທານພອນໃຫ້ທ່ານຢ່າງຫລວງຫລາຍ, ແລະ ພະອົງອາດຈະຕ້ອງການໃຊ້ຄວາມຊຳນານທາງພາສາຂອງທ່ານໃນອະນາຄົດຂ້າງໜ້າ. ແອວເດີ ແຈັບຟີ ອາ ຮໍແລນ ໄດ້ອະທິບາຍວ່າ: "ພວກເຮົາ . . . ຫວັງວ່າຜູ້ສອນສາດສະໜາທຸກຄົນທີ່ກຳລັງຮຽນພາສາໃໝ່ສຳລັບການເຜີຍແຜ່ ຈະຮຽນຮູ້ມັນໃຫ້ເກັ່ງໃນທຸກດ້ານທີ່ເປັນໄປໄດ້. . . . ແລະ ເມື່ອທ່ານເຮັດເຊັ່ນນັ້ນ, ຄວາມຊຳນານໃນການເຜີຍແຜ່ ແລະ ການເປັນພະຍານຂອງທ່ານຈະດີຂຶ້ນກວ່າເກົ່າ. ຜູ້ສົນໃຈຂອງທ່ານຈະຕ້ອນຮັບທ່ານຢ່າງດີ ແລະ ຈະມີຄວາມປະທັບໃຈກັບທ່ານທາງວິນຍານຫລາຍກວ່າ. . . . ບໍ່ຕ້ອງພໍໃຈນຳແຕ່ພາສາທີ່ພວກເຮົາເອີ້ນກັນວ່າ ຄຳສັບສຳລັບຜູ້ສອນສາດສະໜາ ເທົ່ານັ້ນ. ໃຫ້ພະຍາຍາມຮຽນໃຫ້ຮູ້ທຸກສິ່ງທີ່ທ່ານສາມາດໃນພາສານັ້ນ, ແລ້ວທ່ານຈະສາມາດເຂົ້າເຖິງຈິດໃຈຂອງຜູ້ຄົນໄດ້" (ການຖ່າຍທອດທາງດາວທຽມສຳລັບຜູ້ສອນສາດສະໜາ, ເດືອນສິງຫາ 1998).

ທ່ານບໍ່ໄດ້ຢູ່ໂດດດ່ຽວໃນການຮຽນພາສາຂອງເຂດເຜີຍແຜ່ຂອງທ່ານ. ເມື່ອໃດກໍຕາມທີ່ພະຜູ້ເປັນເຈົ້າໄດ້ມອບພະບັນຍັດໃຫ້, ພະອົງຈະຈັດທາງທີ່ຈະຊ່ອຍໃຫ້ເຮັດສຳເລັດມັນ (ເບິ່ງ 1 ນີໄຟ 3:7). ໃຫ້ສະແຫວງຫາຄວາມຊ່ອຍເຫລືອຈາກພະອົງ. ຈົ່ງອຸທິດຕົນໃນການສຶກສາຂອງທ່ານ. ໃນບໍ່ດົນທ່ານຈະມີຄວາມຊຳນານ ໃນພາສາທີ່ທ່ານຕ້ອງການ ເພື່ອເຮັດໃຫ້ຈຸດປະສົງຂອງທ່ານໃນການເປັນຜູ້ສອນສາດສະໜາບັນລຸຄວາມສຳເລັດ.

## ໃຫ້ຮຽນຮູ້ພາສາອັງກິດ

ຖ້າຫາກວ່າທ່ານເວົ້າພາສາອັງກິດບໍ່ເປັນ, ທ່ານຄວນສຶກສາມັນຕອນເປັນຜູ້ສອນສາດສະໜາ. ການເຮັດສິ່ງນີ້ຈະໃຫ້ພອນແກ່ທ່ານໃນເວລາທີ່ທ່ານສອນສາດສະໜາຢູ່ ແລະ ຕະຫລອດຊີວິດຂອງທ່ານ. ການຮຽນຮູ້ພາສາອັງກິດ ຈະຊ່ອຍໃຫ້ທ່ານສາມາດສ້າງສາອານາຈັກຂອງພະຜູ້ເປັນເຈົ້າໃນຫລາຍທາງອື່ນໆ ແລະ ຈະເປັນພອນແກ່ທ່ານ ແລະ ຄອບຄົວຂອງທ່ານ. ຄຳແນະນຳຫລາຍຢ່າງທີ່ມີຢູ່ໃນພາກນີ້ຈະຊ່ອຍທ່ານໄດ້. ໃຫ້ເອົາໃຈໃສ່ໂດຍສະເພາະຕໍ່ຂໍ້ຄວາມດັ່ງຕໍ່ໄປນີ້:

- ຈົ່ງຕັ້ງເປົ້າໝາຍທີ່ຈະເວົ້າພາສາອັງກິດກັບຄູ່ສອນສາດສະໜາຂອງທ່ານ. ຖ້າຫາກຄູ່ສອນສາດສະໜາຂອງທ່ານຮູ້ພາສາອັງກິດແລ້ວ ແລະ ພະຍາຍາມຮຽນພາສາຂອງທ່ານ, ທ່ານອາດຈະເລືອກເວົ້າພາສາອັງກິດໃນຫ້ອງພັກ ແລະ ເວົ້າພາສາຂອງເຂດເຜີຍແຜ່ເມື່ອທ່ານອອກໄປທາງນອກ.
- ກັບຄູ່ສອນສາດສະໜາຂອງທ່ານ, ໃຫ້ອ່ານຈາກພະຄຳພີມໍມອນເປັນພາສາອັງກິດ. ພ້ອມນີ້ທ່ານຄວນປ່ຽນກັນອ່ານ: ທ່ານອ່ານຂໍ້ໜຶ່ງເປັນພາສາອັງກິດ, ແລ້ວຄູ່ສອນສາດສະໜາຂອງທ່ານ ອ່ານຂໍ້ໜຶ່ງເປັນພາສາຂອງເຂດເຜີຍແຜ່. ໃຫ້ຊ່ອຍກັນໃນການອອກສຽງ ແລະ ສຳນຽງໃຫ້ຖືກ.
- ໃຫ້ຂໍຄຳແນະນຳຈາກປະທານເຜີຍແຜ່ຂອງທ່ານກ່ຽວກັບປຶ້ມໄວຍະກອນອັງກິດທີ່ງ່າຍໆ ຖ້າຫາກທ່ານຍັງບໍ່ມີເທື່ອ.

## ຫລັກທຳຂອງການຮຽນຮູ້ພາສາ

ພາກນີ້ຈະບັນຍາຍເຖິງຫລັກທຳທີ່ຈະຊ່ອຍທ່ານສຶກສາ ແລະ ຮຽນຮູ້ພາສາໃຫ້ໄດ້ຜົນດີກວ່າເກົ່າ.

ໝາຍເຫດ

- **ຮັບເອົາຄວາມຮັບຜິດຊອບ.** ໃຫ້ຈັດຕັ້ງ ຫລື ປ່ຽນແປງເປົ້າໝາຍການຮຽນຮູ້ພາສາ ແລະ ແຜນການສຶກສາຂອງທ່ານຕາມປົກກະຕິ. ໃຫ້ພະຍາຍາມໃຊ້ພາສາໃນທຸກໂອກາດ.
- **ເຮັດໃຫ້ການສຶກສາຂອງທ່ານມີຜົນປະໂຫຍດ.** ໃຫ້ຖາມຕົນເອງວ່າ: ເປັນຫຍັງເຮົາຈຶ່ງສຶກສາອັນນີ້? ມັນຈະຊ່ອຍໃຫ້ເຮົາສົນທະນາໄດ້ດີຂຶ້ນແນວໃດ? ຈົ່ງປຽບທຽບສິ່ງທີ່ທ່ານສຶກສາກັບສະພາບຈິງໃນຊີວິດ ແລະ ກິດຈະກຳປະຈຳວັນ. ໃຫ້ສຶກສາພາກສ່ວນພາສາທີ່ຈະຊ່ອຍທ່ານເວົ້າສິ່ງທີ່ທ່ານປາກເວົ້າ. ຕົວຢ່າງເຊັ່ນ, ຖ້າຫາກມີເລື່ອງໃດໃນພະຄຳພີທີ່ທ່ານປາກຈະເອົາມາໃຊ້ໃນການສອນຂອງທ່ານ, ໃຫ້ຮຽນຄຳສັບ ແລະ ໄວຍະກອນສຳຄັນທີ່ຈະຊ່ອຍບັນຍາຍເລື່ອງນີ້.
- **ສະແຫວງຫາໂອກາດທີ່ຈະສົນທະນາ.** ຈົ່ງສະແຫວງຫາຄວາມສົມດູນລະຫວ່າງການສຶກສາໄວຍະກອນ ແລະ ການປະກອບພາສາ ແລະ ການຮຽນຮູ້ຜ່ານທາງກິດຈະກຳປະຈຳວັນຂອງທ່ານ. ບໍ່ມີອັນໃດສາມາດມາທົດແທນການສົນທະນາກັບຄົນທີ່ເວົ້າພາສາທ້ອງຖິ່ນໄດ້.
- **ຮຽນຮູ້ຄວາມຄິດໃໝ່ໃຫ້ລະອຽດລະອໍ.** ທ່ານຈະສາມາດຈື່ຈຳ ແລະ ໃຊ້ຫລັກທຳຂອງການຮຽນຮູ້ພາສາຢ່າງມີຜົນປະໂຫຍດດີ ຖ້າຫາກທ່ານໝັ່ນທົບທວນ ເຖິງສິ່ງທີ່ທ່ານໄດ້ສຶກສາມາຕາມປົກກະຕິ ແລະ ຖ້າຫາກທ່ານແອບໃຊ້ພາສາອີກໃນສະພາບການໃໝ່.

## ຈັດຕັ້ງແຜນການສຶກສາພາສາ

ແຜນການສຶກສາພາສາຊ່ອຍທັງຜູ້ສອນສາດສະໜາໃໝ່ ແລະ ຜູ້ຊຳນານແລ້ວໃຫ້ເອົາໃຈໃສ່ສິ່ງທີ່ເຂົາເຈົ້າສາມາດເຮັດໄດ້ແຕ່ລະມື້ເພື່ອພັດທະນາຄວາມສາມາດຂອງເຂົາເຈົ້າທີ່ຈະເວົ້າພາສາຂອງເຂດເຜີຍແຜ່ໄດ້. ແຜນການຂອງທ່ານຈະຮ່ວມທັງສິ່ງທີ່ທ່ານຈະເຮັດໃນລະຫວ່າງເວລາການສຶກສາພາສາ ແລະ ສິ່ງທີ່ທ່ານຈະເຮັດຕະຫລອດມື້.

ຕາມທີ່ຈຳເປັນ, ໃຫ້ໃຊ້ສ່ວນເວລາການສຶກສາພາສາສ່ວນໃດສ່ວນໜຶ່ງ ເພື່ອຈັດຕັ້ງ ຫລື ປ່ຽນແປງແຜນການສຶກສາຂອງທ່ານ. ແລ້ວແຕ່ລະເຊົ້າໃນລະຫວ່າງເວລາການສຶກສາພາສາຂອງທ່ານ, ໃຫ້ຮຽນພາສາທີ່ຈຳເປັນສຳລັບກິດຈະກຳໃນມື້ນັ້ນ. ຂໍ້ແນະນຳດັ່ງຕໍ່ໄປນີ້ ຈະຊ່ອຍທ່ານໃນການຈັດຕັ້ງແຜນການຮຽນຮູ້ພາສາຂອງທ່ານ:

1. **ຈັດຕັ້ງເປົ້າໝາຍ.** ເປົ້າໝາຍປະຈຳອາທິດ ແລະ ປະຈຳວັນ ຈະຊ່ອຍທ່ານໃຫ້ຮຽນຮູ້ພາສາຂອງເຂດເຜີຍແຜ່ຂອງທ່ານ. ໃຫ້ແນເປົ້າໝາຍຂອງທ່ານໃສ່ການພັດທະນາຄວາມສາມາດສົນທະນາ ແລະ ການສອນຂອງທ່ານໃນລະຫວ່າງເວລາກິດຈະກຳທີ່ໄດ້ຈັດໄວ້, ດັ່ງເຊັ່ນ ເວລາການນັດສອນ, ໂອກາດຊອກຫາຄົນ, ແລະ ການປະຊຸມສະພາຫວອດ. ໃຫ້ທົບທວນເບິ່ງຄວາມກ້າວໜ້າຂອງທ່ານໃນການສຳເລັດເປົ້າໝາຍຮຽນຮູ້ພາສາຂອງທ່ານ. ໃຫ້ຖາມຕົນເອງວ່າ ທ່ານຈະສາມາດເຮັດຫຍັງແດ່ ເພື່ອຈະສົນທະນາດ້ວຍຄວາມຊັດເຈນ ແລະ ດ້ວຍພະລັງໃນລະຫວ່າງເວລາກິດຈະກຳທີ່ໄດ້ຈັດໄວ້.

2. **ເລືອກອຸບປະກອນທີ່ຈະໃຊ້.** ໃຫ້ທົບທວນອຸບປະກອນສຳລັບການຮຽນພາສາດັ່ງຕໍ່ໄປນີ້ ແລະ ຕັດສິນໃຈວ່າ ທ່ານຈະສາມາດໃຊ້ອັນໃດ ເພື່ອຊ່ອຍໃຫ້ທ່ານສຳເລັດເປົ້າໝາຍຂອງທ່ານ:




- ພະຄຳພີມາດຕະຖານສີ່ເຫລັ້ມໃນພາສາຂອງເຂດເຜີຍແຜ່ຂອງທ່ານ.
- ບົດຮຽນໃນພາສາຂອງເຂດເຜີຍແຜ່ຂອງທ່ານ.
- ວັດຈະນານຸກົມຫົວນ້ອຍ.
- ປຶ້ມໄວຍະກອນຫົວນ້ອຍ.
- ອຸບປະກອນຮຽນພາສາຈາກສູນກາງອົບລົມຜູ້ສອນສາດສະໜາ.
- ບັດບັນທຶກນ້ອຍ.
- ປຶ້ມຂຽນນ້ອຍໆ.
- ອຸບປະກອນອື່ນໆຂອງສາດສະໜາຈັກໃນພາສາຂອງເຂດເຜີຍແຜ່ຂອງທ່ານ.

ໝາຍເຫດ

3. **ທ່ອງຈຳຄຳສັບ ແລະ ກຸ່ມຄຳສັບ.** ໃຫ້ຈຳແນກຄຳສັບ ແລະ ກຸ່ມຄຳສັບທີ່ຈະຊ່ອຍໃຫ້ທ່ານສຳເລັດເປົ້າໝາຍຂອງທ່ານ. ແຜນການຮຽນພາສາຂອງທ່ານ ອາດຈະຮ່ວມທັງແນວຄິດດັ່ງຕໍ່ໄປນີ້:

- ໃຫ້ຈຳແນກຄຳສັບ ແລະ ກຸ່ມຄຳສັບໃນບົດຮຽນ, ໃນໃບໂຄສະນາ, ໃນຂໍ້ພະຄຳພີ, ແລະ ໃນໜັງສືຕ່າງໆຂອງສາດສະໜາຈັກທີ່ທ່ານສາມາດໃຊ້ໃນການສອນ.
- ໃຫ້ບັນທຶກຄຳສັບ ຫລື ກຸ່ມຄຳສັບທີ່ທ່ານບໍ່ຮູ້ໄວ້ໃນປຶ້ມຂຽນນ້ອຍ. ໃຫ້ຖືເອົາວັດຈະນານຸກົມຫົວນ້ອຍຕິດຕົວໄປນຳ ແລະ ເປີດເບິ່ງຄວາມໝາຍຂອງຄຳສັບເຫລົ່ານີ້.
- ໃຫ້ເອົາບັດບັນທຶກນ້ອຍໄປນຳເພື່ອສຶກສາຕະຫລອດມື້. ໃຫ້ຂຽນຄຳສັບ ຫລື ກຸ່ມຄຳສັບ ລົງໄວ້ທາງຂ້າງໜຶ່ງ ແລະ ອີກຂ້າງໜຶ່ງ ໃຫ້ຂຽນຄວາມໝາຍຂອງມັນລົງໄວ້. ໃຫ້ຈັດຄຳທີ່ທ່ານຮຽນຮູ້ໄດ້ແລ້ວອອກໄວ້. ໃຫ້ເອົາໃຈໃສ່ຕໍ່ຄຳທີ່ຍັງເຫລືອຢູ່ຈົນກວ່າທ່ານຮຽນຮູ້ຄຳທັງໝົດ.
- ໃຫ້ໃຊ້ຄຳສັບ ແລະ ກຸ່ມຄຳສັບໃໝ່ໃນປະໂຫຍກ ໃນລະຫວ່າງເວລາສຶກສາສ່ວນຕົວ, ເວລາສອນ, ແລະ ຕະຫລອດມື້.
- ຈົ່ງແອບເວົ້າຄຳສັບ ແລະ ກຸ່ມຄຳສັບໃໝ່ອອກສຽງຢ່າງຖືກຕ້ອງ.
- ໃຫ້ທ່ອງຈຳຂໍ້ພະຄຳພີທີ່ສຳຄັນ ໃນພາສາຂອງເຂດເຜີຍແຜ່.
- ໃຫ້ຈື່ຈຳບົດຄວາມຈາກບົດຮຽນ ຫລື ຈາກໃບໂຄສະນາ ທີ່ອະທິບາຍຫລັກທຳພະກິດຕິຄຸນທີ່ສຳຄັນ. ໃຫ້ຊອກຫາທາງອື່ນເພື່ອສະແດງແນວຄິດເຫລົ່ານີ້.

4. **ຮຽນຮູ້ຫລັກໄວຍະກອນ.** ໃຫ້ໃຊ້ອຸບປະກອນສຳລັບການຮຽນພາສາເພື່ອຈຳແນກ ຫລັກໄວຍະກອນທີ່ຈະຊ່ອຍທ່ານໃຫ້ບັນລຸເປົ້າໝາຍຂອງທ່ານ. ຖ້າຫາກຈຳເປັນ, ໃຫ້ຂໍຄວາມຊ່ອຍເຫລືອຈາກຄູ່ສອນສາດສະໜາຂອງທ່ານ, ຜູ້ສອນສາດສະໜາທີ່ຊຳນານແລ້ວ, ຫລື ຈາກສະມາຊິກ. ໃຫ້ພິຈາລະນາເກັບເອົາແນວຄິດບາງຢ່າງດັ່ງ ຕໍ່ໄປນີ້ເຂົ້າຮວມໃຊ້:

- ໃຫ້ໃຊ້ປຶ້ມໄວຍະກອນທີ່ທ່ານໄດ້ຮັບຕອນຢູ່ສູນກາງອົບລົມຜູ້ສອນສາດສະໜາ ຫລື ປຶ້ມທີ່ປະທານເຜີຍແຜ່ຂອງທ່ານໄດ້ອະນຸມັດແລ້ວ ເພື່ອຊ່ອຍໃຫ້ທ່ານເຂົ້າໃຈຫລັກໄວຍະກອນ ແລະ ປະໂຫຍກທີ່ພົບເຫັນຢູ່ໃນບົດຮຽນ, ໃນໃບໂຄສະນາປະກາດ, ແລະ ໃນພະຄຳພີ.
- ໃຫ້ຕຽມປະໂຫຍກທີ່ຈະໃຊ້ໃນກິດຈະກຳທີ່ຈັດໄວ້ແລ້ວ ທີ່ໃຊ້ຫລັກໄວຍະກອນເຫລົ່ານີ້. ໃຫ້ແອບເວົ້າ ແລະ ຂຽນປະໂຫຍກ.
- ຈົ່ງເອົາໃຈໃສ່ຕໍ່ລຳລະດັບຂອງຄຳສັບ ແລະ ຕໍ່ຄຳສັບໃນຫລັກໄວຍະກອນ.
- ໃຫ້ຊອກຫາໂອກາດທີ່ຈະຝຶກຫັດ ແລະ ໃຊ້ໄວຍະກອນທີ່ທ່ານສຶກສາຢູ່ແຕ່ລະມື້.

5. **ຕັ້ງໃຈຟັງ.** ໃຫ້ພິຈາລະນາເກັບເອົາແນວຄິດດັ່ງຕໍ່ໄປນີ້ເຂົ້າຮວມໃຊ້:

- ໃຫ້ຕັ້ງໃຈຟັງຜູ້ຄົນໃນທ້ອງຖິ່ນເວົ້າ. ໃຫ້ເວົ້າຕາມສຽງທີ່ທ່ານໄດ້ຍິນ.
- ເມື່ອທ່ານໄດ້ຍິນຄຳໃດທີ່ທ່ານບໍ່ເຂົ້າໃຈ, ໃຫ້ຂຽນມັນລົງໄວ້ ແລ້ວໃຫ້ຊອກຫາຄວາມໝາຍຂອງຄຳນັ້ນ. ໃຫ້ແອບໃຊ້ຄຳສັບ ຫລື ປະໂຫຍກຕາມແບບແຜນໄວຍະກອນ.
- ເມື່ອທ່ານຟັງ, ໃຫ້ຈຳແນກຄຳສັບ ແລະ ແບບແຜນໄວຍະກອນທີ່ທ່ານໄດ້ຮຽນຮູ້ມາໃນບໍ່ດົນຜ່ານມານັ້ນ.
- ເມື່ອທ່ານໄດ້ຍິນກຸ່ມຄຳສັບຖືກເວົ້າອອກມາຢ່າງແຕກຕ່າງຈາກວິທີທີ່ທ່ານອາດຈະເວົ້າ, ໃຫ້ຂຽນມັນລົງໄວ້ ແລ້ວແອບໃຊ້ມັນ. ເຖິງຢ່າງໃດກໍຕາມ, ໃນຖານະທີ່ເປັນຜູ້ຮັບໃຊ້ຂອງພະຜູ້ເປັນເຈົ້າ, ຈົ່ງໃຊ້ພາສາທີ່ສຸພາບສະເໝີ, ບໍ່ຕ້ອງໃຊ້ພາສາຕະຫລາດ.
- ໃຫ້ຈົດຄຳທີ່ຄົນອາດຈະເວົ້າກັບທ່ານໃນລະຫວ່າງເວລາກິດຈະກຳທີ່ທ່ານໄດ້ຈັດໄວ້ແລ້ວ. ໃຫ້ຊອກຫາຄຳ ແລະ ກຸ່ມຄຳສັບທີ່ກ່ຽວພັນກັບຄຳຕອບເຫລົ່ານີ້. ໃຫ້ວາງແຜນ ແລະ ແອບໃຊ້ວິທີທີ່ທ່ານຈະສາມາດຕອບໄດ້.

6. **ພັດທະນາຄວາມສາມາດທີ່ຈະອ່ານ ແລະ ຂຽນຂອງທ່ານ.** ໃຫ້ອ່ານພະຄຳພີມໍມອນເປັນພາສາຂອງເຂດເຜີຍແຜ່ຂອງທ່ານ ເພື່ອຈະຮຽນຮູ້ຄຳສັບ ແລະ ກຸ່ມຄຳສັບ ແລະ ແອບໃຊ້ໄວຍະກອນ, ການອອກສຽງ, ແລະ ຄວາມຄ່ອງແຄ້ວ. ມັນເປັນພະລັງທີ່ຍິ່ງໃຫຍ່ໃນການໃຊ້ພະຄຳພີໃນການສຶກສາພາສາຂອງທ່ານ. ພ້ອມນີ້ໃຫ້ພິຈາລະນາແນວຄິດດັ່ງຕໍ່ໄປນີ້:

ໝາຍເຫດ

- ໃຫ້ຮຽນອ່ານ ແລະ ຂຽນພະຍັນສະນະ ແລະ ສະລະ, ຕົວໜັງສື, ຫລື ຕົວອັກສອນທີ່ເປັນພາສາຂອງທ່ານ. ສຳລັບລະບົບການຂຽນຕາມຕົວອັກສອນ, ໃຫ້ເອົາໃຈໃສ່ຕໍ່ຄວາມຊຳນານໃນການອ່ານ, ດັ່ງເຊັ່ນ ການອ່ານພະຄຳພີ, ທີ່ຈະຊ່ອຍທ່ານໃນເວລາທ່ານສອນ.
- ໃຫ້ອ່ານພະຄຳພີມໍມອນອອກສຽງ, ພະຄຳພີອື່ນໆ, ຫລື ວາລະສານຂອງສາດສະໜາຈັກ ທີ່ເປັນພາສາຂອງເຂດເຜີຍແຜ່ຂອງທ່ານ. ໃຫ້ເອົາໃຈໃສ່ຕໍ່ ຄຳສັບ, ກຸ່ມຄຳສັບ, ແລະ ໄວຍະກອນທີ່ທ່ານຍັງບໍ່ຮູ້ເທື່ອ. ຖ້າຫາກທ່ານບໍ່ເຂົ້າໃຈຄຳສັບໃດໜຶ່ງ, ໃຫ້ພະຍາຍາມເຂົ້າໃຈຄວາມໝາຍຂອງຄຳນັ້ນ ຈາກຂໍ້ຄວາມທີ່ຢູ່ໃນບົດຄວາມ ກ່ອນທ່ານເປີດເບິ່ງວັດຈະນານຸກົມ. ໃຫ້ຕື່ມຄຳສັບນັ້ນໄວ້ໃນບັດບັນທຶກນ້ອຍຂອງທ່ານ. ຖ້າຫາກຈຳເປັນ ໃຫ້ໃຊ້ພະຄຳພີທີ່ເປັນພາສາເດີມຂອງທ່ານ ແລະ ພາສາຂອງເຂດເຜີຍແຜ່ເບິ່ງໃສ່ກັນ.
- ໃຫ້ຫາຄົນຊ່ອຍສອນທ່ານໃນການອອກສຽງ, ສຳນຽງ, ແລະ ບ່ອນທີ່ຕ້ອງຢຸດບຶດໜຶ່ງຍາມທ່ານອ່ານ.
- ໃຫ້ແອບຂຽນເປັນພາສາໃນເຂດເຜີຍແຜ່ຂອງທ່ານ—ຕົວຢ່າງເຊັ່ນ, ໜັງສືສັ້ນໆສ່ວນຕົວ ແລະ ໜັງສືເຕືອນຄວາມຊົງຈຳ, ຈົດໝາຍ, ໜັງສືຂອບໃຈ, ແລະ ໜັງສືສັ້ນທີ່ໃຫ້ກຳລັງໃຈຄົນ. ໃຫ້ຂຽນປະຈັກພະຍານຂອງທ່ານໃສ່ປຶ້ມພະຄຳພີມໍມອນທີ່ທ່ານຈະແຈກຢາຍ.

7. **ຂໍໃຫ້ຄົນອື່ນຊ່ອຍທ່ານ.** ໃຫ້ພິຈາລະນາເອົາແນວຄິດດັ່ງຕໍ່ໄປນີ້ເຂົ້າຮວມໃຊ້:



- ຖ້າຫາກຄູ່ສອນສາດສະໜາຂອງທ່ານເປັນຄົນທີ່ເວົ້າພາສາທ້ອງຖິ່ນ, ໃຫ້ສວຍເອົາໂອກາດທີ່ດີນີ້ເພື່ອຖາມຄຳຖາມເລື້ອຍໆ ແລະ ຂໍຄວາມຄິດຄວາມເຫັນເລື່ອງພາສາ.
- ຂໍໃຫ້ຄູ່ສອນສາດສະໜາຂອງທ່ານ ແລະ ຄົນທີ່ເວົ້າພາສາທ້ອງຖິ່ນຊ່ອຍບອກທ່ານ ແລະ ແນະນຳວິທີທີ່ຈະເວົ້າພາສາໃຫ້ດີຂຶ້ນ. ຖ້າຫາກເຂົາເຈົ້າໃຊ້ຄຳທີ່ທ່ານບໍ່ເຂົ້າໃຈ, ໃຫ້ທ່ານຂໍໃຫ້ເຂົາອະທິບາຍຄວາມໝາຍໃຫ້ທ່ານ. ສ່ວນຫລາຍເດັກນ້ອຍ ແລະ ຜູ້ເຖົ້າຜູ້ແກ່ຈະເຕັມໃຈຊ່ອຍເຫລືອສະເໝີ.
- ເຊື້ອເຊີນຜູ້ທີ່ທ່ານສອນໃຫ້ຊ່ອຍທ່ານ. ໃຫ້ອະທິບາຍວ່າ, "ຂ້ອຍກຳລັງຮຽນພາສາຂອງເຈົ້າ. ກະລຸນາຊ່ອຍຂ້ອຍແດ່. ຖ້າຫາກຂ້ອຍຫາຄຳເວົ້າຍາກ, ໃຫ້ຊ່ອຍຂ້ອຍຫາຄຳເວົ້າແດ່ເດີ້."
- ບໍ່ຕ້ອງລັ່ງເລໃຈທີ່ຈະຮ້ອງຂໍຄວາມຊ່ອຍເຫລືອໃດໜຶ່ງ: " __________ ວ່າແນວໃດ?" " __________ ອອກສຽງແນວໃດ?" " __________ ແປວ່າຫຍັງ?" "ກະລຸນາເວົ້າຄຳນັ້ນອີກແດ່?" ໃຫ້ຂຽນຄຳຕອບລົງໄວ້ ແລະ ສຶກສາມັນ.
- ຂໍໃຫ້ສະມາຊິກຖາມທ່ານເຖິງຄຳໃນບັດບັນທຶກນ້ອຍ ຫລື ຈາກໃບລາຍການຄຳສັບ ແລະ ຊ່ອຍທ່ານໃນການອ່ານພະຄຳພີອອກສຽງ.

8. **ຊັ່ງຊາ ແລະ ປັບປຸງແຜນການສຶກສາຂອງທ່ານ.** ໃຫ້ທົບທວນເບິ່ງແຜນການສຶກສາຂອງທ່ານແຕ່ລະອາທິດເພື່ອຊັ່ງຊາຖ້າຫາກວ່າມັນຍັງພໍໃຊ້ໄດ້ຢູ່ຫລືບໍ່. ເຊື້ອເຊີນໃຫ້ຄູ່ສອນສາດສະໜາ ແລະ ຜູ້ນຳເຜີຍແຜ່ໃຫ້ຄຳແນະນຳໃນດ້ານທີ່ຈະປັບປຸງໃຫ້ດີຂຶ້ນ.

ໃຫ້ໃຊ້ພາສາໃນເຂດເຜີຍແຜ່ຂອງທ່ານໃນທຸກໆໂອກາດ. ໃຫ້ເວົ້າພາສານັ້ນກັບຄູ່ສອນສາດສະໜາຂອງທ່ານ ເທົ່າທີ່ຈະເປັນໄປໄດ້ຕະຫລອດມື້. ໃຫ້ອະທິຖານໃນພາສານັ້ນເປັນສ່ວນຕົວ ແລະ ຕໍ່ຄົນອື່ນ ເພື່ອຈະຮຽນພາສາສຳລັບການອະທິຖານທີ່ຖືກຕ້ອງ ແລະ ເພື່ອຈະຮຽນກ່າວສິ່ງທີ່ຢູ່ໃນຈິດໃຈຂອງທ່ານອອກມາ.

ບໍ່ຕ້ອງຢ້ານວ່າຈະເວົ້າພາສາຜິດ. ທຸກຄົນທີ່ຮຽນພາສາໃໝ່ຈະເວົ້າຜິດ. ຜູ້ຄົນຈະເຂົ້າໃຈ, ແລະ ເຂົາເຈົ້າຈະຍົກຍ້ອງຄວາມພະຍາຍາມຂອງທ່ານທີ່ຈະຮຽນພາສາຂອງເຂົາເຈົ້າ. ການທ່ອງຈຳກຸ່ມຄຳສັບ ແລະ ຂໍ້ພະຄຳພີ ຈະຊ່ອຍທ່ານໃຫ້ຫລີກເວັ້ນ

ໝາຍເຫດ

ຈາກການໃຊ້ຄຳຜິດ, ແຕ່ທ່ານບໍ່ຄວນທ່ອງຈຳຂໍ້ຄວາມຢ່າງຍືດຍາວ ຫລື ຕຽມບົດຮຽນໃນທາງນັ້ນ ເພື່ອຫລີກເວັ້ນຈາກການໃຊ້ຄຳຜິດ.

**ກິດຈະກຳ: ການສຶກສາສ່ວນຕົວ**

ໃນການໃຊ້ຂໍ້ແນະນຳທີ່ໄດ້ບັນຍາຍໄວ້ຢູ່ຂ້າງເທິງ, ໃຫ້ຈັດແຜນການສຶກສາ. ໃຫ້ທົບທວນແຜນການຂອງທ່ານກັບຄູ່ສອນສາດສະໜາຂອງທ່ານ ຫລື ກັບຜູ້ນຳເຜີຍແຜ່.

## ຮຽນກັບຄູ່ສອນສາດສະໜາຂອງທ່ານ

ຈົ່ງຊ່ອຍຄູ່ສອນສາດສະໜາຂອງທ່ານໃຫ້ປະສົບຄວາມສຳເລັດ ແລະ ມີຄວາມໝັ້ນໃຈໃນການຮຽນຮູ້ພາສາໃນໄວໆເທົ່າທີ່ຈະໄວໄດ້. ຈົ່ງຍົກຍ້ອງຄວາມກ້າວໜ້າຂອງຄູ່ສອນສາດສະໜາຂອງທ່ານ ແລະ ຜູ້ສອນສາດສະໜາຄົນອື່ນໆເລື້ອຍໆດ້ວຍຄວາມຈິງໃຈ. ຈົ່ງລະວັງບໍ່ໃຫ້ເວົ້າ ຫລື ເຮັດອັນໃດທີ່ຈະເຮັດໃຫ້ຄວາມໝັ້ນໃຈຂອງເຂົາອ່ອນແອລົງ, ແຕ່ບໍ່ຕ້ອງປົກປ້ອງເຂົາຫລາຍ ຈົນວ່າເຂົາບໍ່ຮຽນຫຍັງ. ບໍ່ຕ້ອງກັກຄວາມຊ່ອຍເຫລືອໄວ້ໃນຍາມທີ່ຈຳເປັນ. ໃຫ້ໂອກາດເຂົາທີ່ຈະສອນ ແລະ ເປັນພະຍານດ້ວຍຄວາມສຳເລັດຜົນ. ໃຫ້ພິຈາລະນາແນວຄິດດັ່ງທີ່ຕໍ່ໄປນີ້ ເພື່ອການຮຽນຮູ້ກັບຄູ່ສອນສາດສະໜາຂອງທ່ານ:

- ສອນໄວຍະກອນ ແລະ ຄຳສັບອື່ນໆທີ່ທ່ານໄດ້ຮຽນຮູ້ແລ້ວໃຫ້ກັນ.
- ແອບສອນເປັນພາສາຂອງເຂດເຜີຍແຜ່. ທຳອິດ, ຜູ້ສອນສາດສະໜາໃໝ່ອາດຈະສອນຄຳງ່າຍໆ, ສະແດງປະຈັກພະຍານທີ່ເຂົ້າໃຈງ່າຍ,  ແລະ ກ່າວຂໍ້ພະຄຳພີທີ່ທ່ອງຈຳໄວ້ແລ້ວ. ເມື່ອເຂົາມີຄວາມໝັ້ນໃຈ ແລະ ມີຄວາມສາມາດຫລາຍຂຶ້ນ, ເຂົາຈະສາມາດມີສ່ວນຮ່ວມໃນການສອນຜູ້ສົນໃຈໄດ້ຢ່າງເຕັມສ່ວນ.
- ແອບໃຊ້ພາສາໃນການສົນທະນາໃນສະພາບທຳມະດາຂອງຜູ້ສອນສາດສະໜາ.
- ໃຫ້ຕິຕຽນກັນເລື່ອງພາສາແບບທຳມະດາ ແລະ ດ້ວຍຄວາມຫວັງດີ. ມັນສຳຄັນທີ່ທ່ານຈະຮັບເອົາຄຳຕິຕຽນໂດຍບໍ່ມີຄວາມເສຍໃຈ.

ຈົ່ງສັງເກດເບິ່ງວິທີທີ່ຜູ້ສອນສາດສະໜາທີ່ຊຳນານໄດ້ຊ່ອຍຄູ່ສອນສາດສະໜາຂອງລາວໃນເລື່ອງຈິງ ດັ່ງຕໍ່ໄປນີ້.

*ຂ້າພະເຈົ້າຫາກໍມາເຖິງເຂດສອນທີສອງເມື່ອຄູ່ສອນສາດສະໜາຂອງຂ້າພະເຈົ້າບອກຂ້າພະເຈົ້າວ່າ ມັນເປັນທີຂອງຂ້າພະເຈົ້າທີ່ຈະສະແດງຄວາມນຶກຄິດທາງວິນຍານໃນເວລາບັດກິນເຂົ້າແລງ. ຂ້າພະເຈົ້າຢ້ານຫລາຍຂະນາດ. ຄູ່ສອນສາດສະໜາຜູ້ທີໜຶ່ງຂອງຂ້າພະເຈົ້າມັກສອນເລື້ອຍໆ, ແລະ ຂ້າພະເຈົ້າລິ້ງກັບການສອນບົດຮຽນສ່ວນສັ້ນໆ ແລ້ວກໍຟັງເມື່ອລາວອະທິບາຍ ແລະ ຕອບຄຳຖາມຕ່າງໆ.*

*ຂ້າພະເຈົ້າໄດ້ພະຍາຍາມເຮັດໃຫ້ຄູ່ສອນສາດສະໜາຂອງຂ້າພະເຈົ້າເຊື່ອວ່າ ລາວຄວນເປັນຜູ້ສະແດງຄວາມນຶກຄິດທາງວິນຍານ, ແຕ່ລາວໄດ້ຊຸກຍູ້ໃຫ້ຂ້າພະເຈົ້າຮັບເອົາການມອບໝາຍນັ້ນ. ຂ້າພະເຈົ້າກໍໄດ້ຝຶກຫັດດ້ວຍຄວາມຊ່ອຍເຫລືອຈາກລາວ.*

*ເມື່ອເວລາມາເຖິງ, ຂ້າພະເຈົ້າໄດ້ເປີດພະຄຳພີຂອງຂ້າພະເຈົ້າ ແລະ ອ່ານຈາກ 3 ນີໄຟ 5 ແລະ 7. ຂ້າພະເຈົ້າໄດ້ມີບັນຫາເລັກນ້ອຍໃນການອ່ານ, ແຕ່ຂ້າພະເຈົ້າໄດ້ພະຍາຍາມອະທິບາຍວ່າເປັນຫຍັງຂ້າພະເຈົ້າໄດ້ຮູ້ສຶກວ່າຂໍ້ທີ່ຂ້າພະເຈົ້າເລືອກແມ່ນສຳຄັນ, ແລະ ຂ້າພະເຈົ້າໂລ່ງໃຈເມື່ອຂ້າພະເຈົ້າເວົ້າແລ້ວ. ເມື່ອໄດ້ຍິນຄຳຖາມ, ຂ້າພະເຈົ້າຫລຽວຫາຄູ່ສອນຂອງຂ້າພະເຈົ້າເພື່ອໃຫ້ຊ່ອຍຕອບ, ແຕ່ລາວບໍ່ໄດ້ເວົ້າຫຍັງ. ໃນເວລານັ້ນຫລະທີ່ຂ້າພະເຈົ້າໄດ້ປະຫລາດໃຈນຳຕົວເອງທີ່ໄດ້ຕອບຄຳຖາມເປັນພາສາຝະລັ່ງທີ່ພໍເຂົ້າໃຈໄດ້. ຂ້າພະເຈົ້າແຮ່ງປະຫລາດໃຈທີ່ສະມາຊິກບໍ່ໄດ້ຮູ້ສຶກວ່າ ຂ້າພະເຈົ້າບໍ່ແນ່ໃຈຕໍ່ຄວາມຊຳນານໃນການເວົ້າພາສາຂອງຂ້າພະເຈົ້າ. ຂ້າພະເຈົ້າໄດ້ມີຄວາມໝັ້ນໃຈຫລາຍຂຶ້ນ ແລະ ຮູ້ວ່າພາສາຝະລັ່ງຂອງຂ້າພະເຈົ້າແມ່ນດີກວ່າຂ້າພະເຈົ້າຄິດ.*

*ຫລາຍອາທິດໄດ້ຜ່ານໄປ, ແລະ ຄູ່ສອນສາດສະໜາຂອງຂ້າພະເຈົ້າໄດ້ປ່ອຍໃຫ້ຂ້າພະເຈົ້າສອນຕໍ່ໄປ—ເຖິງແມ່ນຕອນຂ້າພະເຈົ້າຄິດວ່າ ຂ້າພະເຈົ້າເຮັດບໍ່ໄດ້ກໍຕາມ, ເຖິງແມ່ນຕອນທີ່ລາວຄິດວ່າ ຂ້າພະເຈົ້າຄົງເຮັດບໍ່ໄດ້. ເພາະວ່າລາວໄດ້ຊຸກຍູ້ໃຫ້ຂ້າພະເຈົ້າເວົ້າ, ຟັງ, ແລະ ສອນ, ຄວາມຊຳນານທາງພາສາຂອງຂ້າພະເຈົ້າຈຶ່ງເລີ່ມກ້າວໜ້າຂຶ້ນໄວ, ແລະ ຂ້າພະເຈົ້າຮູ້ສຶກວ່າ ຂ້າພະເຈົ້າໄດ້ກາຍເປັນເຄື່ອງມືຂອງພະບິດາຜູ້ສະຖິດໃນສະຫວັນຂອງເຮົາ ແທນທີ່ໄດ້ເປັນພຽງຄູ່ສອນສາດສະໜາທີ່ງຽບໆຂອງແອວເດີຜູ້ໜຶ່ງເທົ່ານັ້ນ.*

ໝາຍເຫດ

**ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ**

- ຖ້າຫາກທ່ານກຳລັງຮັບໃຊ້ກັບຜູ້ສອນສາດສະໜາໃໝ່, ທ່ານຈະສາມາດຊ່ອຍຄູ່ສອນຂອງທ່ານໃຫ້ຮຽນຮູ້ພາສາໄດ້ແນວໃດ?
- ຖ້າຫາກທ່ານເປັນຜູ້ສອນສາດສະໜາໃໝ່, ທ່ານຈະຂໍຄວາມຊ່ອຍເຫລືອແນວໃດ ຈາກຄູ່ສອນຜູ້ຊຳນານຂອງທ່ານ?

## ການຮຽນຮູ້ວັດທະນະທຳ ແລະ ພາສາ

ວັດທະນະທຳ ແລະ ພາສາແມ່ນກ່ຽວຂ້ອງກັນ. ການເຂົ້າໃຈວັດທະນະທຳຈະຊ່ອຍອະທິບາຍວິທີທີ່ພາສາຖືກໃຊ້ໃນທາງທີ່ໃຊ້ຢູ່ແນວໃດ. ໃຫ້ພະຍາຍາມເຂົ້າໃຈວັດທະນະທຳຂອງຜູ້ຄົນເພື່ອທ່ານຈະສາມາດສອນຂ່າວສານທີ່ສຳຄັນຂອງການຟື້ນຟູໃນທາງທີ່ມັນຈະຊັດເຈນສຳລັບເຂົາເຈົ້າ.

ສິ່ງທີ່ສຳຄັນທີ່ທ່ານຈະສາມາດໄດ້ຮັບຄວາມໄວ້ວາງໃຈ ແລະ ຄວາມຮັກຂອງຜູ້ຄົນຄືການເຮັດຕາມວັດທະນະທຳຂອງເຂົາເຈົ້າໃນທາງທີ່ຖືກຕ້ອງ. ຜູ້ສອນສາດສະໜາທີ່ດີເດັ່ນຫລາຍຄົນໄດ້ເຮັດແບບນີ້ (ເບິ່ງ 1 ໂກລິນໂທ 9:20–23). ຈົ່ງສະແຫວງໃຫ້ຜູ້ຄົນຮູ້ສຶກສະບາຍໃຈກັບທ່ານ ແລະ ກັບພາສາຂອງທ່ານ.

**ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ**

- ໃຫ້ວາດພາບວ່າທ່ານກຳລັງສອນສາດສະໜາຢູ່ເອເຊຍ. ທ່ານກຳລັງຕຽມຈະສອນຜູ້ໃດຜູ້ໜຶ່ງ ເຖິງການເປັນຄືນມາຈາກຕາຍ, ແລະ ທ່ານຮູ້ວ່າຄົນຊາວພຸດເຊື່ອໃນການກັບມາເກີດໃໝ່. ທ່ານຈະສອນແບບໃດເຖິງການເປັນຄືນມາຈາກຕາຍໃນທາງທີ່ຜູ້ສົນໃຈຈະເຂົ້າໃຈວ່າ ຄຳສອນນີ້ແຕກຕ່າງຈາກການກັບມາເກີດໃໝ່? ທ່ານອາດຈະຕ້ອງຮຽນຄຳສັບໃດ ແລະ ກຸ່ມຄຳສັບໃດ ເພື່ອຈະສຳເລັດພາລະນີ້?

- ໃຫ້ຄິດເຖິງພື້ນຖານທາງວັດທະນະທຳ ແລະ ສາດສະໜາຂອງຄົນທີ່ທ່ານສອນ. ໃຫ້ຈຳແນກພາກສ່ວນທາງຄວາມເຊື່ອທີ່ຈະນຳໃຫ້ເຂົາເຈົ້າເຂົ້າໃຈຜິດຕໍ່ຄຳສອນຂອງພະກິດຕິຄຸນ. ໃຫ້ວາງແຜນວິທີທີ່ທ່ານຈະສອນຄຳສອນນີ້ຢ່າງຊັດເຈນ.

## ຂອງປະທານແຫ່ງການເວົ້າພາສາ

ຈົ່ງສະແຫວງຫາຂອງປະທານແຫ່ງພະວິນຍານ, ຮ່ວມທັງຂອງປະທານແຫ່ງການເວົ້າພາສາ ແລະ ການແປພາສາ. ສຳຄັນກວ່າອັນໃດໝົດ, ນີ້ຈະຊ່ອຍທ່ານໃຫ້ເວົ້າ ແລະ ເຂົ້າໃຈພາສາຂອງຜູ້ຄົນໃນເຂດເຜີຍແຜ່ຂອງທ່ານ. ທ່ານຈະບໍ່ໄດ້ຮັບພອນນີ້ປາດສະຈາກຄວາມພາກພຽນຂອງທ່ານ; ທ່ານຕ້ອງຂະຫຍັນສະແຫວງຫາມັນ. ສ່ວນໜຶ່ງໃນການສະແຫວງຫາຂອງປະທານແຫ່ງການເວົ້າພາສາແມ່ນຕ້ອງໃຊ້ແຮງ ແລະ ຄວາມພະຍາຍາມ ແລະ ການເຮັດສຸດຄວາມສາມາດຂອງທ່ານເພື່ອຈະຮຽນຮູ້ພາສາ. ໃຫ້ໝັ້ນໃຈວ່າພະວິນຍານຈະຊ່ອຍທ່ານເມື່ອທ່ານດຳລົງຊີວິດຕາມທີ່ທ່ານຄວນເຮັດ ແລະ ເຮັດຈົນສຸດຄວາມສາມາດຂອງທ່ານ. ໃຫ້ມີສັດທາວ່າ ທ່ານຈະສາມາດມີຂອງປະທານແຫ່ງການເວົ້າພາສາໃນສະພາບແທ້ຈິງ ແລະ ຄົບຖ້ວນຂອງມັນ.

ເມື່ອທ່ານຮູ້ສຶກວ່າທ່ານມີຄວາມຫຍຸ້ງຍາກໃນການກ່າວຄຳເວົ້າອອກມາໃຫ້ຊັດເຈນຕາມທີ່ທ່ານຫວັງ, ໃຫ້ຈຳໄວ້ວ່າພະວິນຍານສາມາດເວົ້າຕໍ່ຈິດໃຈຂອງລູກໆຂອງພະເຈົ້າໄດ້. ປະທານ ທອມມັສ ແອັສ ມອນສັນ ໄດ້ສອນວ່າ: "ມີພາສາໜຶ່ງ . . . ທີ່ຜູ້ສອນສາດສະໜາແຕ່ລະຄົນຮູ້—ນັ້ນຄື ພາສາທາງພະວິນຍານ. ພາສານີ້ຮຽນບໍ່ໄດ້ຈາກປຶ້ມທີ່ມະນຸດຂຽນຂຶ້ນມາ ຫລື ຈາກການອ່ານ ແລະ ການທ່ອງຈຳ. ພາສາທາງພະວິນຍານມີໃຫ້ສຳລັບຜູ້ທີ່ສະແຫວງຫາ ເພື່ອຢາກຮູ້ພະເຈົ້າ ແລະ ຈະຮັກສາພະບັນຍັດທີ່ສັກສິດຂອງພະອົງຈົນສຸດຫົວໃຈຂອງເຂົາເທົ່ານັ້ນ. ຄວາມຊຳນານໃນພາສານີ້ ຈະອະນຸຍາດໃຫ້ເຮົາຜ່ານຜ່າສິ່ງກີດກັນ, ເອົາຊະນະອຸບປະສັກ, ແລະ ສຳພັດຈິດໃຈຂອງຄົນໄດ້" ("The Spirit Giveth Life," *Ensign*, June 1997, 2).

ໝາຍເຫດ

## ໃຫ້ຈື່ຈຳສິ່ງນີ້

- ສຶກສາຄຳສອນ ແລະ ບົດຮຽນທີ່ເປັນພາສາເດີມຂອງທ່ານກ່ອນ.
- ຮຽນກ່າວຄຳສອນເຫລົ່ານີ້ ແລະ ຄວາມຮູ້ສຶກຂອງທ່ານກ່ຽວກັບຄຳສອນເປັນພາສາໃນເຂດເຜີຍແຜ່ຂອງທ່ານ.
- ຈັດແຜນການສຶກສາພາສາ ແລະ ທົດລອງແນວຄິດໃໝ່ເປັນປະຈຳ ໃນຂະນະທີ່ທ່ານສະແຫວງຫາ ເພື່ອພັດທະນາພາສາຂອງເຂດເຜີຍແຜ່ຂອງທ່ານ.
- ສະແຫວງຫາການນຳພາຂອງພະວິນຍານໃຫ້ຊ່ອຍທ່ານເຂົ້າໃຈ ແລະ ສົນທະນາກັບຄົນໃນເຂດເຜີຍແຜ່ຂອງທ່ານ.

# ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

ໝາຍເຫດ

## ການສຶກສາສ່ວນຕົວ

- ໃຫ້ທົບທວນເບິ່ງຂໍ້ແນະນຳໃນພາກນີ້. ໃຫ້ຊອກຫາຂໍ້ແນະນຳທີ່ທ່ານຍັງບໍ່ທັນໄດ້ລອງເທື່ອ, ແລະ ໃຫ້ຈັດເປົ້າໝາຍທີ່ຈະລອງເຮັດມັນເບິ່ງໃນສອງສາມມື້ຂ້າງໜ້າ.

- ໃນການປະຊຸມເຂດເທື່ອໜ້າ, ໃຫ້ຖາມຜູ້ສອນສາດສະໜາທີ່ຊຳນານໃນພາສາແລ້ວເຖິງສິ່ງທີ່ລາວໄດ້ເຮັດເພື່ອຮຽນຮູ້ພາສາ.

- ໃຫ້ອ່ານ ແລະ ສົນທະນາຂໍ້ຄວາມດັ່ງຕໍ່ໄປນີ້ຂອງ ແອວເດີ ລິເຈີດ ຈີ ສະກາດ: "ໃນບ່ອນທີ່ . . . ຮີດຄອງ ຫລື ປະເພນີແຫ່ງຊາດຂັດກັບຄຳສອນຂອງພະເຈົ້າ, ບໍ່ຕ້ອງເຮັດຕາມມັນ. ໃນບ່ອນທີ່ . . . ຮີດຄອງ ຫລື ປະເພນີແຫ່ງຊາດສອດຄ່ອງກັບຄຳສອນຂອງພະອົງ, ໃຫ້ຮັກສາມັນໄວ້." ("Removing Barriers to Happiness," *Ensign*, May 1998, 87). ໃຫ້ຄິດກ່ຽວກັບວັດທະນະທຳໃນເຂດທີ່ທ່ານຮັບໃຊ້ ວ່າມັນແຕກຕ່າງກັບວັດທະນະທຳຂອງທ່ານເອງແນວໃດ. ໃຫ້ຂຽນຄວາມແຕກຕ່າງລົງໄວ້. ແລ້ວໃຫ້ຂີດສິ່ງທີ່ຂັດກັບຄຳສອນຂອງພະກິດຕິຄຸນອອກ. ໃຫ້ພິຈາລະນາສິ່ງທີ່ຍັງເຫລືອຢູ່, ແລະ ໃຫ້ຄິດກ່ຽວກັບວິທີທີ່ທ່ານຈະສາມາດເຮັດໃຫ້ປະເພນີເຫລົ່ານີ້ເປັນຂອງທ່ານເອງ.

- ໃຫ້ສ້າງແຜນການສຶກສາເພື່ອຈະຕຽມທ່ານໃຫ້ປະຕິບັດສິ່ງດັ່ງຕໍ່ໄປນີ້ໃນພາສາຂອງເຂດເຜີຍແຜ່ຂອງທ່ານ:
  - ເລົ່າເລື່ອງຂອງ ໂຢເຊັບ ສະມິດ.
  - ສະຫລຸບ 3 ນີໄຟ 11.
  - ສະຫລຸບ ແອລະມາ 32.
  - ເລົ່າເລື່ອງຂອງນີໄຟ ແລະ ແຜ່ນຈາລຶກທອງເຫລືອງ (ເບິ່ງ 1 ນີໄຟ 3–5).
  - ອະທິບາຍຄຳວ່າ ຍຸກສະໄໝ.
  - ແບ່ງປັນປະສົບການສ່ວນຕົວ.

- ເຮັດບັດນ້ອຍສຳລັບຄຳທີ່ທ່ານບໍ່ຮູ້ຈາກບົດຮຽນຕ່າງໆ. ໃຫ້ຖືບັດເຫລົ່ານີ້ຕິດຕົວໄປນຳຈົນກວ່າທ່ານໄດ້ຮຽນຮູ້ໝົດທຸກຄຳ.

## ການສຶກສາກັບຄູ່ສອນສາດສະໜາ

- ໃຫ້ແອບສອນບົດຮຽນຂອງຜູ້ສອນສາດສະໜາໃຫ້ກັນເປັນພາສາຂອງເຂດເຜີຍແຜ່ຂອງທ່ານ.

- ຂໍໃຫ້ຄູ່ສອນສາດສະໜາຂອງທ່ານຟັງການອອກສຽງຂອງທ່ານ ແລະ ຊ່ອຍທ່ານປັບປຸງໃຫ້ດີຂຶ້ນກວ່າເກົ່າ.

- ໃຫ້ເລືອກເອົາເລື່ອງ ຫລື ຂໍ້ພະຄຳພີທີ່ທ່ານຢາກຈະໃຊ້ໃນການສອນ. ແອບສະຫລຸບມັນໃນຄຳເວົ້າຂອງທ່ານເອງ.

- ໃຫ້ທົບທວນແນວຄິດໃນບົດນີ້. ໃຫ້ສົນທະນາຂໍ້ແນະນຳທີ່ທ່ານສາມາດໃຊ້ໃນການສຶກສາກັບຄູ່ສອນສາດສະໜາໃນອາທິດຕໍ່ໄປ.

ໝາຍເຫດ

- ຖ້າຫາກທ່ານກຳລັງຝຶກຜູ້ສອນສາດສະໜາໃໝ່, ໃຫ້ສັງເກດເບິ່ງສິ່ງທີ່ຄູ່ສອນສາດສະໜາຂອງທ່ານບໍ່ເຂົ້າໃຈ. ໃຫ້ຂຽນຄຳສັບ, ກຸ່ມຄຳສັບ, ຫລື ໄວຍະກອນ ອັນທີ່ຈະຊ່ອຍຄູ່ສອນສາດສະໜາຂອງທ່ານໄດ້. ໃຫ້ອະທິບາຍ ແລະ ຝຶກວິທີທີ່ຈະໃຊ້ຖ້ອຍຄຳທີ່ຂຽນໄວ້ນັ້ນໃນກິດຈະກຳທີ່ຈະມາເຖິງ ເຊິ່ງໄດ້ຈັດໄວ້ແລ້ວ.

## ການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດ

- ເຊື້ອເຊີນໃຫ້ຄົນເວົ້າພາສາທ້ອງຖິ່ນມາຮ່ວມການປະຊຸມນຳ. ຈັດໃຫ້ຜູ້ສອນສາດສະໜາສອນເຂົາເຈົ້າເປັນໃນກຸ່ມນ້ອຍໆ. ຂໍໃຫ້ຄົນທີ່ເວົ້າພາສາທ້ອງຖິ່ນຈົດບັນທຶກ ແລະ ໃຫ້ຄຳຕິຊົມກ່ຽວກັບການເວົ້າພາສາຂອງຜູ້ສອນສາດສະໜາ.

- ມອບໝາຍຜູ້ສອນສາດສະໜາຄົນໜຶ່ງ ຫລື ສອງຄົນລ່ວງໜ້າ ໃຫ້ເລົ່າເຖິງຄວາມສຳເລັດທີ່ເຂົາເຈົ້າໄດ້ມີໃນການສຶກສາພາສາ. ໃຫ້ເຂົາເຈົ້າແບ່ງປັນແນວຄິດຂອງຕົນ.

- ມອບໝາຍຜູ້ສອນສາດສະໜາທີ່ຊຳນານໃຫ້ສອນສັ້ນໆກ່ຽວກັບພາສາບາງສ່ວນທີ່ຍາກສຳລັບຜູ້ສອນສາດສະໜາ. ໃຫ້ສະແດງຕົວຢ່າງໃນການໃຊ້ທີ່ຖືກຕ້ອງ, ແລະ ໃຫ້ຜູ້ສອນສາດສະໜາແອບໃຊ້.

- ໃຫ້ຜູ້ສອນສາດສະໜາທີ່ເປັນຄົນປະເທດນັ້ນ ມາແບ່ງປັນຄວາມຮູ້ເລື່ອງວັດທະນະທຳທີ່ເປັນປະໂຫຍດ.

## ປະທານເຜີຍແຜ່

- ໃຫ້ສຳພາດຜູ້ສອນສາດສະໜາເປັນພາສາທີ່ເຂົາກຳລັງຮຽນຢູ່ເປັນລະຍະ ລະຍະ.

- ໃຫ້ຖາມຜູ້ນຳຖານະປະໂລຫິດໃນທ້ອງຖິ່ນເຖິງວິທີທີ່ຜູ້ສອນສາດສະໜາ ຈະສາມາດພັດທະນາພາສາຂອງເຂົາເຈົ້າ.

- ໃຫ້ຈຳແນກສ່ວນພາສາທີ່ຜູ້ສອນສາດສະໜາມັກໃຊ້ຜິດ ໃນການຮຽນພາສາຂອງເຂດເຜີຍແຜ່ຂອງທ່ານ. ໃຫ້ຄຳແນະນຳໃນການປະຊຸມເຂດເຖິງການແກ້ໄຂການໃຊ້ພາສາໃນທາງຜິດເຫລົ່ານີ້.

- ໃຫ້ສອນຜູ້ສອນສາດສະໜາເຖິງຄຳສອນຂອງ ຂອງປະທານທາງວິນຍານ.

- ໃຫ້ສັງເກດເບິ່ງຜູ້ສອນສາດສະໜາຂອງທ່ານໃນເວລາເຂົາສອນເປັນພາສາຂອງເຂດເຜີຍແຜ່.

- ໃຫ້ຫາໂອກາດໃຊ້ພາສາກັບຜູ້ສອນສາດສະໜາຂອງທ່ານ.



# ເຮົາຈະໃຊ້ເວລາໃຫ້ເປັນປະໂຫຍດໄດ້ແນວໃດ?

ໝາຍເຫດ

## ໃຫ້ພິຈາລະນາເລື່ອງນີ້

- ຈຸດເປົ້າໝາຍຈະສາມາດຊ່ອຍເຮົາໃຫ້ເປັນຜູ້ສອນສາດສະໜາທີ່ມີປະສິດທິພາບໄດ້ແນວໃດ?
- ແມ່ນຫຍັງຄວນເປັນຈຸດສູນກາງຂອງເປົ້າໝາຍຂອງເຮົາ?
- ອຸບປະກອນໃນການວາງແຜນ ແລະ ແຫລ່ງຊ່ອຍເຫລືອຂອງເຮົາຄືຫຍັງແດ່ ແລະ ເຮົາຈະໃຊ້ສິ່ງເຫລົ່ານີ້ໃນວິທີໃດ?
- ເປັນຫຍັງປຶ້ມບັນທຶກປະຈຳເຂດຈຶ່ງສຳຄັນ?
- ເຮົາຈະຈັດການວາງແຜນປະຈຳອາທິດ ແລະ ປະຈຳວັນໃນວິທີໃດ?
- ເຮົາຈະຮູ້ໄດ້ວິທີໃດຖ້າຫາກຈຸດເປົ້າໝາຍ ແລະ ແຜນການຂອງເຮົາກຳລັງຊ່ອຍໃຫ້ວຽກງານຂອງພະຜູ້ເປັນເຈົ້າກ້າວໄປໜ້າ?

ທ່ານຖືກມອບໝາຍໃຫ້ເຮັດວຽກງານຂອງພະຜູ້ເປັນເຈົ້າຢູ່ໃນເຂດໃດໜຶ່ງໂດຍສະເພາະ. ພະອົງຢາກໃຫ້ທ່ານດູແລເຂດຂອງທ່ານດ້ວຍຄວາມຮັກ ແລະ ຄວາມຫ່ວງໄຍ. ຈຸດປະສົງຂອງທ່ານແມ່ນເພື່ອຊ່ອຍຄົນອື່ນໃຫ້ເຂົ້າມາສູ່ພະອົງຜ່ານທາງການບັບຕິດສະມາ ແລະ ການຢືນຢັນ.

ຈົ່ງເຮັດຈົນສຸດຄວາມສາມາດເພື່ອຊ່ອຍໃຫ້ເຂດຂອງທ່ານເຂັ້ມແຂງກວ່າເວລາທີ່ທ່ານໄດ້ມາຢູ່. ຈຸດເປົ້າໝາຍທີ່ມີຄວາມໝາຍ ແລະ ການວາງແຜນດ້ວຍຄວາມລະມັດລະວັງ ຈະຊ່ອຍທ່ານເຮັດສິ່ງທີ່ພະຜູ້ເປັນເຈົ້າຕ້ອງການຈາກທ່ານໃຫ້ສຳເລັດ. ເມື່ອທ່ານດູແລຜູ້ຄົນໃນເຂດທີ່ທ່ານຖືກມອບໝາຍ, ທ່ານຈະຮັບຜິດຊອບຕໍ່ພະອົງ ແລະ ຜູ້ນຳເຜີຍແຜ່ຂອງທ່ານ.

ຈົດໝາຍເອີ້ນໃຫ້ທ່ານເປັນຜູ້ສອນສາດສະໜາກ່າວວ່າ: “ທ່ານຈະຖືກຄາດຫວັງໃຫ້ອຸທິດເວລາ ແລະ ຄວາມຕັ້ງໃຈທັງໝົດຂອງທ່ານໃນການຮັບໃຊ້ພະຜູ້ເປັນເຈົ້າ, ໃຫ້ປະວຽກງານສ່ວນຕົວອື່ນໆທຸກຢ່າງໄວ້ຂ້າງຫລັງ. ເມື່ອທ່ານເຮັດສິ່ງເຫລົ່ານີ້ ພະຜູ້ເປັນເຈົ້າຈະໃຫ້ພອນແກ່ທ່ານ ແລະ ທ່ານຈະກາຍເປັນຜູ້ທີ່ວົງວອນແທນ ແລະ ຜູ້ສົ່ງຂ່າວສານທີ່ມີປະສິດທິພາບເຖິງຄວາມຈິງ. ພວກເຮົາມອບຄວາມໝັ້ນໃຈໄວ້ນຳທ່ານ ແລະ ອະທິຖານວ່າ ພະຜູ້ເປັນເຈົ້າຈະຊ່ອຍທ່ານເຮັດໃຫ້ຄວາມຮັບຜິດຊອບຂອງທ່ານໃນການປະຕິບັດຕາມການມອບໝາຍທີ່ສັກສິດນີ້ບັນລຸຄວາມສຳເລັດ.” ບົດນີ້ຈະຊ່ອຍທ່ານໃຫ້ຮູ້ວ່າ ການຈັດຕັ້ງເປົ້າໝາຍ, ການວາງແຜນ ແລະ ການຮູ້ຈັກຮັບຜິດຊອບ ສາມາດຊ່ອຍໃຫ້ຫລາຍຄົນຮັບເອົາພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່ແນວໃດ.

ໝາຍເຫດ

## ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ

ອ່ານ Jacob 5:11–13, 61–64, 74–75, ແລະ ຕອບຄຳຖາມເຫລົ່ານີ້:

- ພຣະຜູ້ເປັນເຈົ້າຮູ້ສຶກຢ່າງໃດຕໍ່ລູກໆຂອງພຣະອົງ?
- ພຣະຜູ້ເປັນເຈົ້າຕ້ອງການຄວາມພະຍາຍາມຢ່າງໃດຈາກຜູ້ຮັບໃຊ້ຂອງພຣະອົງ?

## ຈຸດຊີ້ບອກສຳລັບການປ່ຽນໃຈເຫລື້ອມໃສ

ບາງທີທ່ານໄດ້ຖາມຕົວເອງວ່າໜ້າທີ່ໃດໃນໜ້າທີ່ທັງຫລາຍຂອງທ່ານສຳຄັນທີ່ສຸດ. ເພື່ອຈະຕອບຄຳຖາມນີ້ໄດ້, ທ່ານຕ້ອງເຂົ້າໃຈຈຸດປະສົງຂອງທ່ານ ແລະ ຮູ້ວ່າການໃຊ້ເວລາໃຫ້ມີຜົນປະໂຫຍດຈະສາມາດຊ່ອຍທ່ານ ໃນການບັນລຸຈຸດປະສົງນີ້ແນວໃດ.

ຈຸດປະສົງຂອງທ່ານຄື ທີ່ຈະເຊື້ອເຊີນຜູ້ຄົນໃຫ້ເຂົ້າມາສູ່ພຣະຄຣິດດ້ວຍການຊ່ອຍໃຫ້ເຂົາເຈົ້າຮັບເອົາພຣະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່ຜ່ານທາງສັດທາໃນພຣະເຢຊູຄຣິດ ແລະ ການຊົດໃຊ້ຂອງພຣະອົງ, ການກັບໃຈ, ການຮັບບັບຕິສະມາ, ການຮັບເອົາຂອງປະທານແຫ່ງພຣະວິນຍານບໍລິສຸດ, ແລະ ການອົດທົນຈົນເຖິງທີ່ສຸດ. ຜູ້ນຳຂອງສາດສະໜາຈັກ ໄດ້ຈຳແນກຈຸດຊີ້ບອກໄວ້ແລ້ວ ເພື່ອຊ່ອຍທ່ານໃຫ້ເອົາໃຈໃສ່ຈຸດປະສົງນີ້. ເມື່ອທ່ານເອົາໃຈໃສ່ຕໍ່ຈຸດຊີ້ບອກເຫລົ່ານີ້, ທ່ານຈະຊ່ອຍໃຫ້ຜູ້ຄົນກ້າວໜ້າໄປສູ່ການຮັບບັບຕິສະມາ, ການຢືນຢັນ, ການມີຄວາມເຂັ້ມແຂງຕໍ່ໄປໃນສາດສະໜາຈັກ, ແລະ ການປ່ຽນໃຈເຫລື້ອມໃສຕະຫລອດໄປ.

### ຈຸດຊີ້ບອກເພື່ອບັນທຶກ ແລະ ລາຍງານ

- ຜູ້ປ່ຽນໃຈເຫລື້ອມໃສທີ່ໄດ້ຮັບບັບຕິສະມາ ແລະ ການຢືນຢັນ
- ຜູ້ສົນໃຈທີ່ໄດ້ຕັ້ງວັນທີເພື່ອຮັບບັບຕິສະມາ
- ຜູ້ສົນໃຈທີ່ໄດ້ເຂົ້າຮ່ວມກອງປະຊຸມສິນລະລຶກ
- ບົດຮຽນທີ່ສອນໃຫ້ຜູ້ສົນໃຈໂດຍມີສະມາຊິກຢູ່ນຳ
- ບົດຮຽນອື່ນໆທີ່ໄດ້ສອນ
- ຜູ້ສົນໃຈທີ່ກຳລັງກ້າວໜ້າ
- ຜູ້ຖືກແນະນຳທີ່ໄດ້ຮັບ ແລະ ໄດ້ຕິດຕໍ່
- ຜູ້ສົນໃຈໃໝ່
- ບົດຮຽນທີ່ສອນໃຫ້ຜູ້ປ່ຽນໃຈເຫລື້ອມໃສໃນບໍ່ດົນມານີ້ ແລະ ສະມາຊິກທີ່ບໍ່ເຂັ້ມແຂງ

ຈຸດຊີ້ບອກເຫລົ່ານີ້ບອກເຖິງເຫດການ ແລະ ເງື່ອນໄຂທີ່ສະແດງໃຫ້ເຫັນເຖິງຄວາມກ້າວໜ້າຂອງຜູ້ຄົນໄປສູ່ການປ່ຽນໃຈເຫລື້ອມໃສທີ່ແທ້ຈິງ. ຂ້າງລຸ່ມນີ້ຄືຄຳບັນຍາຍສັ້ນໆສຳລັບສັບສຳຄັນແຕ່ລະຢ່າງ:

**ຜູ້ປ່ຽນໃຈເຫລື້ອມໃສທີ່ໄດ້ຮັບບັບຕິສະມາ ແລະ ການຢືນຢັນ:** ຜູ້ປ່ຽນໃຈເຫລື້ອມໃສແຕ່ລະຄົນທີ່ໄດ້ຮັບບັບຕິສະມາ ແລະ ການຢືນຢັນ.

**ຜູ້ສົນໃຈທີ່ໄດ້ຕັ້ງວັນທີເພື່ອຮັບບັບຕິສະມາ:** ຜູ້ສົນໃຈແຕ່ລະຄົນທີ່ໄດ້ຕົກລົງຮັບບັບຕິສະມາ ແລະ ຮັບການຢືນຢັນໃນວັນທີທີ່ໄດ້ຕັ້ງໄວ້ແລ້ວ.

**ຜູ້ສົນໃຈທີ່ໄດ້ເຂົ້າຮ່ວມກອງປະຊຸມສິນລະລຶກ:** ຜູ້ສົນໃຈແຕ່ລະຄົນທີ່ໄດ້ເຂົ້າຮ່ວມກອງປະຊຸມສິນລະລຶກ.

ໝາຍເຫດ

**ບົດຮຽນທີ່ສອນໃຫ້ຜູ້ສົນໃຈໂດຍມີສະມາຊິກຢູ່ນຳ:** ຈຳນວນບົດຮຽນທີ່ໄດ້ສອນໃຫ້ຜູ້ສົນໃຈທຸກຄົນໂດຍມີສະມາຊິກຢູ່ນຳ. ທຳມະດາແລ້ວ ບົດຮຽນຈະຮ່ວມທັງການສອນຫລັກທຳພະກິດຕິຄຸນໜຶ່ງຂໍ້ ຫລື ຫລາຍກວ່ານັ້ນຈາກບົດຮຽນ , ການອະທິຖານເປີດ ແລະ ປິດ, ການເຊື້ອເຊີນໃຫ້ເຮັດຄຳໝັ້ນສັນຍາ. ມັນບໍ່ສຳຄັນທີ່ຈະສອນຫລັກທຳທຸກຂໍ້ໃນບົດຮຽນ ກ່ອນທ່ານຈະນັບເປັນບົດຮຽນທີ່ໄດ້ສອນ. ຜົນດີຂອງການສອນຂອງທ່ານສາມາດ ວັດແທກໄດ້ຕາມການເຕີບ ໂຕຂອງຜູ້ສົນໃຈໃນສັດທາຂອງເຂົາເຈົ້າໃນພະຜູ້ຊ່ອຍໃຫ້ລອດ, ການກັບ ໃຈຈາກການລ່ວງລະເມີດຂອງເຂົາ, ແລະ ການຈິງຈັງໃນການຕຽມພ້ອມທີ່ຈະຮັບບັບຕິດສະມາ ແລະ ການຢືນຢັນ.

**ບົດຮຽນອື່ນໆທີ່ໄດ້ສອນ:** ຈຳນວນບົດຮຽນທີ່ໄດ້ສອນໃຫ້ຜູ້ສົນໃຈທີ່ບໍ່ມີສະມາຊິກຢູ່ນຳ. ສັບສຳຄັນຂໍ້ນີ້ ຕາມທຳມະດາແລ້ວ ແມ່ນກ່າວເຖິງ ໂອກາດທີ່ສອນ ຕອນຊອກຫາຄົນໃນສະຖານທີ່ຕ່າງໆ.

**ຜູ້ສົນໃຈທີ່ກຳລັງກ້າວໜ້າ:** ຈຳນວນຜູ້ສົນໃຈທັງໝົດທີ່ຖືກສອນ ສອງ ຫລື ສາມບົດຮຽນ ແລະ ໄດ້ຮັກສາຄຳໝັ້ນສັນຍາ ເຊັ່ນ ການອະທິຖານ, ອ່ານຈາກພະຄຳພີມໍມອນ, ໄປໂບດ, ແລະ ຕຽມພ້ອມເພື່ອການຮັບບັບຕິດສະມາ ແລະ ຮັບການຢືນຢັນ. ຜູ້ສົນໃຈທີ່ເຕັມໃຈຈະຮຽນຮູ້ກ່ຽວກັບພະກິດຕິຄຸນຕໍ່ໄປ ແຕ່ວ່າຍັງຮັກສາຄຳໝັ້ນສັນຍາບໍ່ໄດ້ເທື່ອ ບໍ່ໄດ້ຖືວ່າເປັນຜູ້ສົນໃຈທີ່ກຳລັງກ້າວໜ້າຕາມທີ່ໄດ້ອະທິບາຍໃນນີ້. ເຂົາເຈົ້າຖືກນັບວ່າເປັນຜູ້ສົນໃຈໃໝ່ ຫລື ເປັນຜູ້ສົນໃຈຄົນອື່ນໆ.

**ຜູ້ຖືກແນະນຳທີ່ໄດ້ຮັບ ແລະ ໄດ້ຕິດຕໍ່:** ຈຳນວນຜູ້ຖືກແນະນຳທັງໝົດທີ່ທ່ານໄດ້ຕິດຕໍ່ແລ້ວ ແລະ ໄດ້ສອນແລ້ວ ຫລືວ່າໄດ້ນັດຈະກັບໄປສອນ. ເມື່ອທ່ານໄດ້ຕິດຕໍ່ກັບຜູ້ຖືກແນະນຳ, ແລ້ວລາຍຊື່ຂອງຜູ້ຖືກແນະນຳນັ້ນ ຈະຖືກຍ້າຍອອກຈາກກຸ່ມຜູ້ຖືກແນະນຳ ແລະ ກາຍເປັນຜູ້ສົນໃຈໃໝ່, ໄດ້ຖືກໝາຍໄວ້ເພື່ອຕິດຕາມຕໍ່ໄປ, ຫລືວ່າຖືກຍ້າຍອອກຈາກລາຍຊື່ຂອງກຸ່ມຜູ້ສົນໃຈ. ຜູ້ຖືກແນະນຳຈະຖືກນັບວ່າໄດ້ຕິດຕໍ່ແລ້ວຖ້າຫາກວ່າຫລັງຈາກທ່ານໄດ້ພະຍາຍາມຫລາຍເທື່ອ ແຕ່ຍັງບໍ່ສາມາດຕິດຕໍ່ກັບຜູ້ນັ້ນໄດ້ ຫລື ທ່ານພົບເຫັນວ່າ ທີ່ຢູ່ນັ້ນຜິດ. ລາຍຊື່ຂອງຜູ້ຖືກແນະນຳຈຳນວນນີ້ຈະຖືກສົ່ງກັບຄືນໄປຫ້ອງການເຜີຍແຜ່ພ້ອມກັບຄຳອະທິບາຍສັ້ນໆວ່າ ເປັນຫຍັງຈຶ່ງຕິດຕໍ່ບໍ່ໄດ້.

ຈຳນວນຜູ້ຖືກແນະນຳທີ່ໄດ້ຮັບໝາຍເຖິງຜູ້ຖືກແນະນຳທັງໝົດທີ່ທ່ານໄດ້ຮັບ ແຕ່ຍັງບໍ່ທັນໄດ້ຕິດຕໍ່ເທື່ອ (ຜູ້ຖືກແນະນຳຈາກສະມາຊິກ, ຜູ້ສົນໃຈ, ສູນກາງຂອງສາດສະໜາຈັກ, ແລະ ອື່ນໆ). ໃນການລາຍງານ, ໃຫ້ຂຽນຈຳນວນຜູ້ຖືກແນະນຳທີ່ຍັງບໍ່ໄດ້ໄປຢ້ຽມຢາມເທື່ອ ເຊິ່ງໄດ້ໝາຍຕື່ມໃສ່ແຕ່ລະອາທິດ. ໃຫ້ບວກຈຳນວນຂອງຜູ້ຖືກແນະນຳໃໝ່ໃສ່ ແລະ ເມື່ອໄດ້ໄປຢ້ຽມຢາມຜູ້ທີ່ຖືກແນະນຳແລ້ວ, ໃຫ້ລົບຈຳນວນຄົນເຫລົ່ານັ້ນອອກຈາກຈຳນວນທັງໝົດ. ແຕ່ໃຫ້ຈຳໄວ້ວ່າ "ຜູ້ຖືກແນະນຳທີ່ໄດ້ໄປຢ້ຽມຢາມ" ໝາຍເຖິງຈຳນວນທີ່ໄດ້ໄປຢ້ຽມຢາມໃນອາທິດທີ່ລາຍງານ.

**ຜູ້ສົນໃຈໃໝ່:** ຈຳນວນຄົນທັງໝົດທີ່ໄດ້ຮັບບົດຮຽນ ແລະ ໄດ້ຮັບການນັດໝາຍໃຫ້ກັບໄປສອນໃນວັນທີ່ຕັ້ງໄວ້.

**ບົດຮຽນທີ່ສອນໃຫ້ຜູ້ປ່ຽນໃຈເຫລື້ອມໃສໃນບໍ່ດົນມານີ້ ແລະ ສະມາຊິກທີ່ບໍ່ເຂັ້ມແຂງ:** ຈຳນວນບົດຮຽນທີ່ໄດ້ສອນໃຫ້ຜູ້ປ່ຽນໃຈເຫລື້ອມໃສທີ່ໄດ້ເປັນສະມາຊິກຕ່ຳກວ່າໜຶ່ງປີ ແລະ ສະມາຊິກທີ່ບໍ່ເຂັ້ມແຂງ.

ເມື່ອທ່ານຈັດຕັ້ງເປົ້າໝາຍ ແລະ ວາງແຜນ, ໃຫ້ຊັ່ງຊາສິ່ງທ່ານເຮັດທາງດ້ານຄວາມພະຍາຍາມຂອງທ່ານທີ່ຈະເພີ່ມຈຳນວນຄົນທີ່ໄດ້ບັນຍາຍໄວ້ໃນຈຸດຊີ້ບອກເຫລົ່ານີ້. ເປົ້າໝາຍຂອງທ່ານ ຄວນໃຫ້ຈຳນວນຄົນໃນທຸກໆຈຸດຊີ້ບອກມີຫລາຍຂຶ້ນ.

ທ່ານຈະເຮັດຫລາຍຢ່າງທີ່ບໍ່ໄດ້ບັນຍາຍໄວ້ໃນຈຸດຊີ້ບອກ, ເຊັ່ນການຕິດຕໍ່ຕາມຖະໜົນຫົນທາງ ຫລື ການສຶກສາສ່ວນຕົວ ແລະ ການສຶກສາກັບຄູ່ສອນສາດສະໜາ. ກິດຈະກຳທີ່ສຳຄັນເຫລົ່ານີ້ກໍມີສ່ວນຊ່ອຍຈຸດຊີ້ບອກຈຸດໃດຈຸດໜຶ່ງ ຫລື ຫລາຍຈຸດ. ຕົວຢ່າງຄື, ເມື່ອທ່ານສອນຜູ້ສົນໃຈທີ່ທ່ານພົບພໍ້ໂດຍຄວາມພະຍາຍາມຂອງທ່ານເອງ, ທ່ານໄດ້ເພີ່ມຜູ້ສົນໃຈໃໝ່ໃສ່ໃນກຸ່ມຜູ້ຄົນທີ່ທ່ານສອນ. ພ້ອມນີ້, ຄຸນນະພາບຂອງການສຶກສາສ່ວນຕົວ ແລະ ການສຶກສາກັບຄູ່ສອນສາດສະໜາຂອງທ່ານຈະພັດທະນາຄວາມສາມາດຂອງທ່ານ ທີ່ຈະສອນດ້ວຍພະວິນຍານ, ທີ່ຈະໃຫ້ພອນແກ່ຜູ້ສົນໃຈໃໝ່ ແລະ ຜູ້ສົນໃຈທີ່ກຳລັງກ້າວໜ້າຂອງທ່ານ. ພະລັງຂອງການຊອກຫາ ແລະ ການສອນຈະມີອິດທິພົນຕໍ່ຈຸດຊີ້ບອກທຸກໆຈຸດ. ໃຫ້ຊັ່ງຊາທຸກຢ່າງທີ່ທ່ານເຮັດໂດຍອີງໃສ່ຖ້າຫາກວ່າມັນຊ່ອຍເພີ່ມຈຳນວນຜູ້ຄົນໃຫ້ຈຸດຊີ້ບອກເຫລົ່ານີ້ຫລືບໍ່. ຖ້າຫາກທ່ານ ແລະ ຄູ່ສອນສາດສະໜາຂອງທ່ານບໍ່ເຫັນວ່າ ກິດຈະກຳເຜີຍແຜ່ໃດໜຶ່ງຈະຊ່ອຍເພີ່ມຈຳນວນຄົນໃສ່ໃນຈຸດຊີ້ບອກຈຸດໃດຈຸດໜຶ່ງ ຫລື ຫລາຍຈຸດ, ແລ້ວພວກທ່ານຕ້ອງຄິດເບິ່ງ ຖ້າຫາກວ່າກິດຈະກຳນັ້ນກຸ້ມຄ່າຕໍ່ເວລາຂອງທ່ານຫລືບໍ່.

ໝາຍເຫດ

### ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ

ໃນປື້ມບັນທຶກການສຶກສາຂອງທ່ານ, ໃຫ້ຂຽນກິດຈະກຳທາງການເຜີຍແຜ່ທີ່ທ່ານໄດ້ເຮັດພາຍໃນສາມມື້ທີ່ຜ່ານມາ. ສຳລັບກິດຈະກຳແຕ່ລະຢ່າງ, ໃຫ້ຄິດເບິ່ງວ່າ ມັນມີອິດທິພົນຕໍ່ຈຸດຊີ້ບອກຈຸດໃດຈຸດໜຶ່ງຫລືບໍ່. ຖ້າຫາກມັນມີ, ໃຫ້ຂຽນ *ມີ* ໃສ່ທາງຂ້າງ. ຖ້າຫາກມັນບໍ່ມີ, ໃຫ້ຂຽນ *ບໍ່ມີ*. ສຳລັບກິດຈະກຳແຕ່ລະຢ່າງທີ່ໄດ້ໝາຍວ່າ *ມີ*, ໃຫ້ອະທິບາຍວ່າມັນມີອິດທິພົນແບບໃດ. ສຳລັບກິດຈະກຳແຕ່ລະຢ່າງທີ່ໄດ້ໝາຍວ່າ *ບໍ່ມີ*, ໃຫ້ຕັດສິນໃຈວ່າເປັນຫຍັງທ່ານໄດ້ເຮັດລົງໄປ ແລະ ວ່າທ່ານຈະເຮັດກິດຈະກຳນີ້ອີກຕໍ່ໄປຫລືບໍ່. ໃຫ້ສົນທະນາກັບຄູ່ສອນສາດສະໜາຂອງທ່ານເຖິງສິ່ງທີ່ທ່ານຂຽນລົງ, ແລະ ໃຫ້ອະທິບາຍວ່າເປັນຫຍັງທ່ານໄດ້ໝາຍກິດຈະກຳບາງຢ່າງວ່າ *ມີ* ແລະ ບາງຢ່າງວ່າ *ບໍ່ມີ*. ໃຫ້ສົນທະນາວ່າທ່ານຈະເຊົາເຮັດກິດຈະກຳໃດ.

## ປື້ມບັນທຶກປະຈຳເຂດ ແລະ ອຸປະກອນສຳລັບການວາງແຜນ ແລະ ການລາຍງານ

ກ່ຽວກັບຜູ້ທີ່ໄດ້ເຂົ້າຮ່ວມໃນສາດສະໜາຈັກໂດຍການຮັບບັບຕິສະມາ ແລະ ການຢືນຢັນໃນວັນເວລາຂອງເພິ່ນ, ໂມໂລໄນໄດ້ສອນວ່າ, "ຮັບຊື່ຂອງເຂົາໄວ້ເພື່ອຈະໄດ້ຈົດຈຳ ແລະ ບຳລຸງລ້ຽງເຂົາດ້ວຍຄຳອັນປະເສີດຂອງພະເຈົ້າ, ເພື່ອໃຫ້ເຂົາຢູ່ໃນທາງທີ່ຖືກຕ້ອງ" (ໂມໂລໄນ 6:4).

ທ່ານໄດ້ຮັບອຸປະກອນເພື່ອຊ່ອຍໃຫ້ທ່ານບັນທຶກຂໍ້ມູນທີ່ກ່ຽວກັບຜູ້ຄົນທີ່ທ່ານສອນ. ອຸປະກອນເຫລົ່ານີ້ຈະອະນຸຍາດໃຫ້ທ່ານແບ່ງປັນຂໍ້ມູນໃນຈຳນວນທີ່ເໝາະສົມ ກັບຜູ້ຄົນທີ່ຕ້ອງການມັນ, ຕາມການສະແດງຕໍ່ໄປນີ້.

| ລຳດັບຂອງການລາຍງານຂໍ້ມູນ | | ອຸປະກອນ: |
|---|---|---|
| ປະທານເຜີຍແຜ່ | | ໃບລາຍງານປະຈຳອາທິດຂອງຜູ້ສອນສາດສະໜາ |
| ຜູ້ນຳເຜີຍແຜ່ | | ໃບສະຫລຸບລາຍງານທາງໂທລະສັບ |
| ສະພາຫວອດ | ຈຳນວນຂໍ້ມູນ | ບັນທຶກຄວາມກ້າວໜ້າ |
| ຜູ້ສອນສາດສະໜາ | | ປະຕິທິນປະຈຳວັນຂອງຜູ້ສອນສາດສະໜາ; ປື້ມບັນທຶກປະຈຳເຂດ |

ເຄື່ອງມືເຫລົ່ານີ້ ແລະ ຂໍ້ມູນທັງໝົດທີ່ຈຳເປັນເພື່ອຈະປະຕິບັດວຽກງານຂອງທ່ານຖືກເກັບໄວ້ໃນປື້ມບັນທຶກປະຈຳເຂດ ແລະ ໃນປະຕິທິນປະຈຳວັນຂອງຜູ້ສອນສາດສະໜາ. ປື້ມບັນທຶກປະຈຳເຂດໄດ້ຖືກຈັດໄວ້ດັ່ງຕໍ່ໄປນີ້:

- **ແຜນທີ່ຂອງເຂດ**
  - ແຜນທີ່ຂອງເຂດທີ່ມີເສັ້ນຂີດອ້ອມຂອບເຂດ
- **ບັນທຶກຄວາມກ້າວໜ້າ**
  - ໃບບັນທຶກຄວາມກ້າວໜ້າ
- **ຜູ້ສົນໃຈທີ່ໄດ້ຕັ້ງວັນທີເພື່ອຮັບບັບຕິສະມາ ແລະ ຮັບການຢືນຢັນ**
  - ໃບບັນທຶກການສອນ
- **ຜູ້ສົນໃຈທີ່ກຳລັງກ້າວໜ້າ**
  - ໃບບັນທຶກການສອນ
- **ຜູ້ສົນໃຈໃໝ່ ແລະ ຜູ້ສົນໃຈຄົນອື່ນໆ**
  - ໃບບັນທຶກການສອນ
- **ຄົນທີ່ອາດຈະກາຍເປັນຜູ້ສົນໃຈ**
  - ເອກະສານສຳລັບຄົນທີ່ອາດຈະກາຍເປັນຜູ້ສົນໃຈ
  - ຜູ້ຖືກແນະນຳຈາກການສື່ສານ ແລະ ບັນທຶກຜູ້ຖືກແນະນຳອື່ນໆ
- **ຜູ້ສົນໃຈເກົ່າ**
  - ໃບບັນທຶກການສອນ

- **ຜູ້ປ່ຽນໃຈເຫລື້ອມໃສບໍ່ດົນມານີ້ ແລະ ສະມາຊິກທີ່ບໍ່ເຂັ້ມແຂງ**
  - ໃບບັນທຶກການສອນ
  - ໃບບັນທຶກການຮັບພິທີຂອງຜູ້ປ່ຽນໃຈເຫລື້ອມໃສ
- **ຂໍ້ມູນຂອງຫວອດ ແລະ ເຂດເຜີຍແຜ່**
  - ໃບລາຍຊື່ ແລະ ທີ່ຢູ່ຂອງສະມາຊິກໃນຫວອດ
  - ໃບລາຍຊື່ ແລະ ຕຳແໜ່ງຂອງສະມາຊິກ ໃນຫວອດ
  - ຕາຕະລາງການປະຊຸມຂອງຫວອດ ແລະ ຜູ້ສອນສາດສະໜາ
  - ລາຍຊື່ຄອບຄົວທີ່ບໍ່ແມ່ນສະມາຊິກທັງໝົດ
  - ໃບລາຍຊື່ ແລະ ທີ່ຢູ່ຂອງຜູ້ສອນສາດສະໜາ ໃນທ້ອງຖິ່ນ ຫລື ໃນເຂດຂອງທ່ານ
- **ຜູ້ນຳ**
  - ໃບສະຫລຸບລາຍງານທາງໂທລະສັບ
- **ຂໍ້ມູນກ່ຽວກັບເຂດ**
  - ຂໍ້ມູນກ່ຽວກັບຫ້ອງພັກ
  - ການຂົນສົ່ງທາງລັດ
  - ຮ້ານຕັດຜົມ
  - ຮ້ານຊັກເຄື່ອງ
  - ບ່ອນໄປຊື້ຂອງ
  - ບ່ອນທີ່ຕ້ອງຫລີກເວັ້ນ
  - ຜູ້ຄົນທີ່ຈະຕິດຕໍ່

## ປື້ມບັນທຶກປະຈຳເຂດ

ຂອບເຂດການເຜີຍແຜ່ທຸກບ່ອນຈະມີປື້ມບັນທຶກປະຈຳເຂດ, ທີ່ກາຍເປັນບັນທຶກຕໍ່ໄປເຖິງວຽກງານປະຈຳວັນຂອງທ່ານ. ໃຫ້ຂຽນຂໍ້ມູນທີ່ສຳຄັນໄວ້ໃນນັ້ນທຸກໆມື້, ແລະ ໃຫ້ເປີດເບິ່ງມັນທຸກອາທິດ ໃນເວລາທ່ານວາງແຜນຕາຕະລາງປະຈຳອາທິດຂອງທ່ານ. ໃຫ້ເກັບມັນໄວ້ໃຫ້ເປັນລະບຽບ, ທັນປະຈຸບັນ, ແລະ ຖືກຕ້ອງ ເພື່ອຜູ້ສອນສາດສະໜາໃນອະນາຄົດຈະສາມາດເພີ່ມເຕີມການຮັບໃຊ້ຢ່າງດົນໃຈໃສ່ກັບການຮັບໃຊ້ທີ່ ທ່ານໄດ້ເຮັດຜ່ານມາແລ້ວ. ເມື່ອຖືກເຊື້ອເຊີນ, ໃຫ້ເອົາປື້ມບັນທຶກປະຈຳເຂດໄປນຳ ເມື່ອທ່ານໄປຮັບການສຳພາດ ຫລື ໄປຮ່ວມກອງປະຊຸມເຂດ ເພື່ອຜູ້ນຳເຜີຍແຜ່ຈະໄດ້ກວດກາມັນ ແລະ ຊ່ອຍທ່ານໃຫ້ຮູ້ວິທີທີ່ຈະໃຊ້ມັນໃຫ້ມີຜົນດີ.

ທ່ານຄວນອ້າງເຖິງສ່ວນໃດສ່ວນໜຶ່ງໃນປື້ມບັນທຶກປະຈຳເຂດແຕ່ລະມື້ ເມື່ອທ່ານຂຽນຂໍ້ມູນ ແລະ ປ່ຽນແຜນການຂອງທ່ານ. ເມື່ອຖືກເຊີນ, ໃຫ້ເອົາປື້ມບັນທຶກປະຈຳເຂດໄປນຳ ເມື່ອທ່ານໄປຮ່ວມກອງປະຊຸມເຂດ ແລະ ໄປຮັບການສຳພາດເພື່ອຜູ້ນຳເຜີຍແຜ່ຈະໄດ້ກວດເບິ່ງມັນ. ປື້ມຫົວນີ້ຄວນຖືກປະໄວ້ຢູ່ຫ້ອງພັກຂອງທ່ານ ເມື່ອທ່ານໄດ້ຍ້າຍໄປບ່ອນອື່ນ ເພື່ອຜູ້ສອນສາດສະໜາໃນອະນາຄົດຈະສາມາດໃຊ້ຂໍ້ມູນນັ້ນ.

ຢູ່ໃນປື້ມບັນທຶກປະຈຳເຂດຂອງທ່ານ, ໃຫ້ບັນທຶກລາຍຊື່ຂອງທຸກຄົນທີ່ທ່ານຮັບໃຊ້ໄວ້ຢ່າງຖືກຕ້ອງ, ຄົບຖ້ວນ, ແລະໃຫ້ທັນປະຈຸບັນ. ຕໍ່ໄປນີ້ແມ່ນຄຳອະທິບາຍກ່ຽວກັບອຸບປະກອນທີ່ຕຽມໄວ້ໃຫ້.

ໝາຍເຫດ

ໝາຍເຫດ

**ບັນທຶກການສອນ:** ເອກະສານໃບນີ້ຊ່ອຍທ່ານບັນທຶກຂໍ້ມູນທີ່ລະອຽດກ່ຽວກັບຄວາມກ້າວໜ້າຂອງຜູ້ສົນໃຈ, ຜູ້ປ່ຽນໃຈເຫລື້ອມໃສໃນບໍ່ດົນມານີ້, ແລະ ສະມາຊິກທີ່ບໍ່ເຂັ້ມແຂງ ທີ່ທ່ານກຳລັງສອນ.

- ຂໍ້ມູນສ່ວນຕົວ
- ວັນທີຮັບບັບຕິດສະມາ ແລະ ການຢືນຢັນ



THE CHURCH OF JESUS CHRIST OF LATTER-DAY SAINTS

**ບັນທຶກການສອນ**

| ເຂດເຜີຍແຜ່ | ຫວອດ ຫລື ສາຂາ | ສະເຕກ ຫລື ທ້ອງຖິ່ນ |
|---|---|---|

**ຂໍ້ມູນສ່ວນຕົວ** (ເບິ່ງຂ້າງຫລັງເພື່ອຂໍ້ມູນເພີ່ມເຕີມ.)

| ຊື່ຂອງຄົນດຽວ ຫລື ຄູ່ຜົວເມຍ | *ຊະນິດ | ອາຍຸ | ວັນທີໄດ້ພົບກັນເທື່ອທຳອິດ | ວັນທີຕັ້ງໄວ້ເພື່ອຮັບບັບຕິດສະມາ | ວັນທີຮັບບັບຕິດສະມາອີກຫົນ | ວັນທີຮັບການຢືນຢັນ | ຊື່ລູກ (ຊື່ອື່ນໆໃຫ້ຂຽນໄວ້ຂ້າງຫລັງ ໃນພາກ ຂໍ້ມູນເບື້ອງຫລັງ.) | |
|---|---|---|---|---|---|---|---|---|
| | | | | | | | ອາຍຸ | ອາຍຸ |
| | | | | | | | ອາຍຸ | ອາຍຸ |

| ທີ່ຢູ່ | ເລກໂທລະສັບ | ຜູ້ສອນສາດສະໜາຄູ່ທຳອິດທີ່ໄດ້ສອນ |
|---|---|---|

| ຊື່ຂອງຜູ້ຊ່ອຍຜູກມິດ ແລະ ຄູສອນປະຈຳບ້ານ ຫລື ຜູ້ປ່ຽນສອນ | ເລກໂທລະສັບ | ທີ່ຢູ່ |
|---|---|---|
| | | |
| | | |

*ຊະນິດ: ສ = ຜູ້ສົນໃຈ; ປສ = ຜູ້ປ່ຽນໃຈເຫລື້ອມໃສບໍ່ດົນມານີ້; ສບ = ສະມາຊິກທີ່ບໍ່ເຂັ້ມແຂງ; ສຊ = ສະມາຊິກ; ຄບ = ຄອບຄົວທີ່ບໍ່ແມ່ນສະມາຊິກທັງໝົດ

| ວັນທີທີ່ສອນບົດຮຽນ ແລະ ຫລັກທຳ (ຂີດອ້ອມຖ້າມີສະມາຊິກຢູ່ນຳຕອນໄດ້ສອນ.) | | | | | | ສະພາບຂອງຄຳໝັ້ນສັນຍາ ຫລື ກິດຈະກຳສຳລັບຜູ້ສົນໃຈ ຫລື ຫົວໜ້າຄອບຄົວ | | |
|---|---|---|---|---|---|---|---|---|
| **ຂ່າວສານກ່ຽວກັບການຟື້ນຟູ** | ກ່ອນຮັບບັບຕິດສະມາ | ຫລັງຈາກຮັບບັບຕິດສະມາ | **ພະບັນຍັດ** | ກ່ອນຮັບບັບຕິດສະມາ | ຫລັງຈາກຮັບບັບຕິດສະມາ | ຂໍ້ເຊື້ອເຊີນແລ້ວ | ຂໍ້ທີ່ກຳລັງຮັກສາ | |
| ພະເຈົ້າເປັນພະບິດາເທິງສະຫວັນທີ່ຮັກຂອງເຮົາ | | | ການເຊື່ອຟັງ | | | | | ອ່ານຈາກພະຄຳພີມໍມອນ |
| ພະກິດຕິຄຸນໃຫ້ພອນແກ່ຄອບຄົວ | | | ອະທິຖານເລື້ອຍໆ | | | | | ອະທິຖານກ່ຽວກັບ ໂຢເຊັບ ສະມິດ ແລະ ພະຄຳພີມໍມອນ |
| ຍຸກສະໄໝພະກິດຕິຄຸນ | | | ສຶກສາພະຄຳພີ | | | | | ໄປຮ່ວມກອງປະຊຸມສິນລະລຶກ ແລະ ຫ້ອງຮຽນອື່ນໆ |
| ການປະຕິບັດຂອງພະຜູ້ຊ່ອຍໃຫ້ລອດຢູ່ໃນໂລກ | | | ຮັກສາວັນຊະບາໂຕໃຫ້ສັກສິດ | | | | | ລູກຜູ້ໄປຫ້ອງປະຖົມໄວ, ຫ້ອງຊາຍໜຸ່ມ, ຫລື ຫ້ອງຍິງໜຸ່ມ |
| ການປະຖິ້ມຄວາມເຊື່ອທີ່ຍິ່ງໃຫຍ່ | | | ບັບຕິດສະມາ ແລະ ການຢືນຢັນ | | | | | ແນະນຳພີ່ນ້ອງ ແລະ ໝູ່ເພື່ອນໃຫ້ຮູ້ຈັກກັບຜູ້ສອນສາດສະໜາ |
| ການຟື້ນຟູ: ໂຢເຊັບ ສະມິດ | | | ເຮັດຕາມສາດສະດາ | | | | | ໄປຮ່ວມພິທີບັບຕິດສະມາ |
| ພະຄຳພີມໍມອນ | | | ຮັກສາພະບັນຍັດສິບປະການ | | | | | ພົບກັບອະທິການ ແລະ ສະມາຊິກໃນສະພາຫວອດ |
| ການອະທິຖານ, ພະວິນຍານບໍລິສຸດ | | | ຮັກສາກົດພົມມະຈັນ | | | | | ພັດທະນາການຜູກມິດນຳສະມາຊິກໃນຫວອດ |
| **ແຜນແຫ່ງຄວາມລອດ** | | | ຮັກສາພະວາຈາແຫ່ງປັນຍາ | | | | | ຮັກສາພະບັນຍັດສິບປະການ |
| ຊີວິດກ່ອນຊີວິດຢູ່ໃນໂລກ | | | ຮັກສາກົດເງິນສ່ວນສິບ | | | | | ຮັກສາກົດພົມມະຈັນ |
| ການສ້າງ | | | ຮັກສາກົດແຫ່ງການຖືສິນອົດເຂົ້າ | | | | | ຮັກສາພະວາຈາແຫ່ງປັນຍາ |
| ສິດທິການເລືອກ ແລະ ການຕົກ | | | ວິທີບໍລິຈາກເງິນສ່ວນສິບແລະ ເງິນບໍລິຈາກອື່ນໆ | | | | | ຮັກສາກົດເງິນສ່ວນສິບ |
| ຊີວິດຂອງເຮົາຢູ່ໃນໂລກ | | | ເຊື່ອຟັງ ແລະ ນັບຖືກົດໝາຍ | | | | | ຮັກສາກົດແຫ່ງການຖືສິນອົດເຂົ້າ |
| ການຊົດໃຊ້ | | | **ກົດ ແລະ ພິທີການ** | | | | | ຮັກສາກົດໝາຍຂອງບ້ານເມືອງ |
| ໂລກວິນຍານ | | | ຖານະປະໂລຫິດ ແລະ ອົງການຊ່ອຍເຫລືອ | | | | | ຮັບການສຳພາດເພື່ອບັບຕິດສະມາ ແລະ ການຢືນຢັນ |
| ການເປັນຄືນມາຈາກຄວາມຕາຍ, ການພິພາກສາ, ແລະ ການເປັນອຳມະຕະ | | | ວຽກງານການເຜີຍແຜ່ | | | | | ເຊີນໝູ່ເພື່ອນ ແລະ ພີ່ນ້ອງໃຫ້ໄປຮ່ວມພິທີບັບຕິດສະມາ ແລະ ການຢືນຢັນ |
| ອານາຈັກແຫ່ງລັດສະໝີພາບ | | | ການແຕ່ງງານນິລັນດອນ | | | | | ຮັບບັບຕິດສະມາ ແລະ ການຢືນຢັນ |
| **ພະກິດຕິຄຸນຂອງພະເຢຊູຄິດ** | | | ພະວິຫານ ແລະ ປະຫວັດຄອບຄົວ | | | | | ອະທິຖານ ແລະ ສຶກສາພະຄຳພີທຸກມື້ເປັນສ່ວນຕົວ |
| ຊຳລະລ້າງໃຫ້ສະອາດຈາກບາບ | | | ການຮັບໃຊ້ | | | | | ອະທິຖານ ແລະ ສຶກສາພະຄຳພີທຸກມື້ເປັນຄອບຄົວ |
| ສັດທາໃນພະເຢຊູຄິດ | | | ການສອນ ແລະ ການຮຽນຮູ້ | | | | | ມີການສັງສັນໃນຄອບຄົວທຸກອາທິດ |
| ການກັບໃຈ | | | ອົດທົນຈົນເຖິງທີ່ສຸດ | | | | | ຮັບຖານະປະໂລຫິດ |
| ບັບຕິດສະມາ, ພັນທະສັນຍາທຳອິດຂອງເຮົາ | | | **ທົບທວນຄຳຖາມສຳລັບການສຳພາດເພື່ອຮັບບັບຕິດສະມາ** | | | | | ຮັບການເອີ້ນຢູ່ໂບດ |
| ຂອງປະທານແຫ່ງພະວິນຍານບໍລິສຸດ | | | | | | | | ມີສ່ວນຮ່ວມໃນການບັບຕິດສະມາແທນຄົນຕາຍ |
| ອົດທົນຈົນເຖິງທີ່ສຸດ | | | | | | | | |

(ເບິ່ງຂ້າງຫລັງສຳລັບຂໍ້ມູນເພີ່ມເຕີມ)

© 2005 IRI. 7/04. 7/04. ຈັດພິມໃນສະຫະລັດອາເມລິກາ 36987 331

*(ຂ້າງໜ້າ)*

- ບັນທຶກຕອນທ່ານໄດ້ສອນຫລັກທຳຈາກບົດຮຽນແຕ່ລະບົດໃນບົດຮຽນຫ້າບົດ ແລະ ຖ້າຫາກວ່າສະມາຊິກໄດ້ຢູ່ນຳຫລືບໍ່. ພາກນີ້ອະນຸຍາດໃຫ້ທ່ານຈົດສິ່ງທີ່ທ່ານສອນໄວ້, ເຖິງແມ່ນວ່າທ່ານຈະສອນບົດຮຽນ ຕາມລຳດັບໃດກໍຕາມ.
- ທ່ານສາມາດຈົດບົດຮຽນທີ່ໄດ້ສອນກ່ອນການບັບຕິດສະມາ ແລະ ບົດຮຽນທີ່ໄດ້ສອນຫລັງຈາກການບັບຕິດສະມາ.
- ບັນທຶກສະພາບຂອງຄຳໝັ້ນສັນຍາທີ່ຜູ້ສົນໃຈຕ້ອງຮັກສາ. ໃນພາກນີ້ທ່ານຈະບັນທຶກວັນທີທີ່ທ່ານໄດ້ສະເໜີການເຊື້ອເຊີນ ແລະ ໝາຍຖ້າຫາກວ່າເຂົາເຈົ້າໄດ້ຮັກສາຄຳໝັ້ນສັນຍາຢ່າງສະໝ່ຳສະເໝີຫລືບໍ່.

ໝາຍເຫດ

- ບ່ອນທ່ານຂຽນຂໍ້ມູນເບື້ອງຫລັງຂອງບຸກຄົນ ຫລື ຄອບຄົວ. ບໍ່ຕ້ອງບັນຍາຍເລື່ອງສ່ວນຕົວ ຫລື ຄຳທີ່ບໍ່ດີ.
- ບ່ອນທ່ານຂຽນຂໍ້ມູນທີ່ສຳຄັນຈາກການຢ້ຽມສອນ. ທ່ານອາດຈະຮ່ວມທັງຄວາມຫ່ວງໄຍ ທີ່ຜູ້ຄົນໄດ້ສະແດງອອກມາ, ຄຳໝັ້ນສັນຍາທີ່ເຂົາມີບັນຫາທີ່ຈະຮັກສາ, ແລະ ຄວາມສຳເລັດທີ່ເຂົາໄດ້ມີໃນການອ່ານ ຫລື ການອະທິຖານ. ທ່ານສາມາດໝາຍໄວ້ຕື່ມອີກ ຖ້າຫາກວ່າເຂົາໄດ້ໄປໂບດຫລືບໍ່ ແລະ ສິ່ງທີ່ເຂົາໄດ້ອ່ານໃນພະຄຳພີມໍມອນ.
- ບ່ອນທ່ານຈົດການຢ້ຽມຢາມຕໍ່ໄປໄວ້ ຖ້າຫາກວ່າບຸກຄົນ ຫລື ຄອບຄົວເຂົ້າຮຽນເລື່ອງສາດສະໜາຈັກ.

ເມື່ອບັນທຶກການສອນຖືກສ້າງໄວ້ແລ້ວ, ມັນຄວນຢູ່ໃນປຶ້ມບັນທຶກປະຈຳເຂດຈົນກວ່າບຸກຄົນນັ້ນ ຫລື ຄອບຄົວນັ້ນກາຍເປັນສະມາຊິກທີ່ເຕັມສ່ວນໃນສາດສະໜາຈັກ, ຍ້າຍໜີ, ຫລື ຕາຍໄປ.



*(ຂ້າງຫລັງ)*




**ບັນທຶກຄວາມກ້າວໜ້າ:** ບັນທຶກນີ້ຊ່ອຍທ່ານສະຫລຸບຄວາມກ້າວໜ້າຂອງຜູ້ສົນໃຈ, ຜູ້ປ່ຽນໃຈເຫລື້ອມໃສໃໝ່, ແລະ ສະມາຊິກທີ່ບໍ່ເຂັ້ມແຂງທີ່ທ່ານກຳລັງສອນ. ມັນຍັງອະນຸຍາດໃຫ້ທ່ານລາຍງານເຖິງຈຸດຊີ້ບອກນຳອີກ. ໃຫ້ໃຊ້ມັນເພື່ອປະສານງານກັບຜູ້ນຳຂອງຫວອດ ແລະ ສະເຕກ ໃນການປະຊຸມປະສານງານຂອງຜູ້ສອນສາດສະໜາ ແລະ ໃນການປະຊຸມສະພາຫວອດ. ທ່ານຈະຂຽນຕື່ມໃສ່ບັນທຶກນີ້ ໃນລະຫວ່າງການວາງແຜນປະຈຳອາທິດຂອງທ່ານ ຫລື ກ່ອນການປະຊຸມສະພາຫວອດ. ຖ້າຫາກເປັນໄປໄດ້, ໃຫ້ເອົາໃບສຳເນົາຂອງບັນທຶກນີ້ໃຫ້ອະທິການ, ຜູ້ນຳເຜີຍແຜ່ປະຈຳຫວອດ, ແລະ ສະມາຊິກໃນສະພາຫວອດແຕ່ລະອາທິດ ຫລື ຕາມທີ່ຕ້ອງການ. ໃຫ້ແນ່ໃຈວ່າ ຂໍ້ມູນທີ່ທ່ານຮ່ວມເຂົ້າໃນບັນທຶກຄວາມກ້າວໜ້ານັ້ນຄົບຖ້ວນ, ຖືກຕ້ອງ, ແລະ ຂຽນຢ່າງແຈ່ມແຈ້ງ. ການເຮັດສິ່ງນີ້ຈະສ້າງຄວາມໝັ້ນໃຈຂອງສະພາຫວອດໃນຕົວທ່ານ.

ໝາຍເຫດ

ໃຫ້ໃຊ້ໃບສະຫລຸບລາຍງານທາງໂທລະສັບ ແລະ ໃບລາຍງານປະຈຳອາທິດຂອງຜູ້ສອນສາດສະໜາ ເພື່ອລາຍງານການບັບຕິສະມາໃນອາທິດທີ່ມັນເກີດຂຶ້ນ ແລະ ເພື່ອລາຍງານການຢືນຢັນໃນອາທິດທີ່ມັນເກີດຂຶ້ນ. ພ້ອມນີ້, ກໍໃຫ້ຟ້າວຈັດສົ່ງໃບບັນທຶກການຮັບບັບຕິສະມາ ທີ່ຂຽນຢ່າງຄົບຖ້ວນ ແລະ ຖືກຕ້ອງໄປຢ່າງໄວ ເພາະວ່າໃບບັນທຶກສະມາຊິກທີ່ແທ້ຈິງຈະບໍ່ຖືກສ້າງຂຶ້ນ ຈົນກວ່າສູນກາງຂອງສາດສະໜາຈັກໄດ້ຮັບໃບລາຍງານການຮັບບັບຕິສະມາ ແລະ ການຢືນຢັນຈາກເຂດເຜີຍແຜ່ເສຍກ່ອນ.

**ຄົນທີ່ອາດຈະກາຍເປັນຜູ້ສົນໃຈ:** ເອກະສານໃບນີ້ສາມາດຊ່ວຍທ່ານເກັບບັນທຶກລາຍຊື່ຂອງຄົນທີ່ອາດຈະກາຍເປັນຜູ້ສົນໃຈ.

- ສະພາບຂອງຄົນທີ່ອາດຈະກາຍເປັນຜູ້ສົນໃຈ. (ເຂົາເຄີຍຖືກຍ້າຍອອກຈາກລາຍຊື່ຂອງຜູ້ສົນໃຈຫລືບໍ່? ເຂົາກຳລັງຖືກສອນໃນຕອນນີ້ຫລືບໍ່? ຫລືທ່ານຕ້ອງຕິດຕາມເບິ່ງອີກຕໍ່ໄປ?)
- ຖ້າຫາກຄົນນັ້ນເປັນຜູ້ຖືກແນະນຳ ຫລື ໄດ້ຖືກພົບເຫັນໂດຍຜູ້ສອນສາດສະໜາ.
- ວັນທີທີ່ຄົນນັ້ນຖືກຕິດຕໍ່.
- ຄວາມຄິດເຫັນທີ່ສຳຄັນ.



ໃຫ້ກ່າຍເອົາຂໍ້ມູນທີ່ສຳຄັນຈາກພາກ "ຄົນທີ່ອາດຈະກາຍເປັນຜູ້ສົນໃຈ" ຈາກປະຕິທິນປະຈຳວັນ ຂອງຜູ້ສອນສາດສະໜາໃສ່ໃນໃບ "ຄົນທີ່ອາດຈະກາຍເປັນຜູ້ສົນໃຈ". ໃຫ້ໃຊ້ຂໍ້ມູນນີ້ເພື່ອວາງແຜນການຢ້ຽມຢາມຕໍ່ໄປ, ທົບທວນວຽກງານເຜີຍແຜ່ຂອງສະມາຊິກກັບຜູ້ນຳເຜີຍແຜ່ປະຈຳຫວອດ, ແລະ ວາງແຜນຈັດກິດຈະກຳອື່ນໆ ທີ່ຈະຊ່ວຍຜູ້ຄົນເຫລົ່ານີ້ໃຫ້ເລີ່ມສົນໃຈຮຽນພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່. ເອກະສານໃບນີ້ກໍຖືກໃຊ້ເປັນບັນທຶກປະຫວັດນຳອີກສຳລັບຜູ້ສອນສາດສະໜາທີ່ໄດ້ຖືກມອບໝາຍໃຫ້ມາເຂດນີ້ໃນອະນາຄົດ. ເມື່ອທ່ານຕຽມຍ້າຍໄປເຂດໃໝ່, ໃຫ້ກ່າຍຂໍ້ມູນທັງໝົດໄວ້ຈາກປະຕິທິນປະຈຳວັນຂອງຜູ້ສອນສາດສະໜາ.

**ໃບສະຫລຸບລາຍງານທາງໂທລະສັບ:** ໃຫ້ໃຊ້ໃບລາຍງານນີ້ທຸກອາທິດ ເພື່ອເກັບກຳຂໍ້ມູນຈາກຈຸດຊີ້ບອກແຕ່ລະຈຸດ. ຄູ່ສອນສາດສະໜາແຕ່ລະຄູ່ຈະໃຊ້**ໃບສະຫລຸບລາຍງານທາງໂທລະສັບ**ທີ່ເຫັນຢູ່ທາງຫລັງປະຕິທິນປະຈຳວັນຂອງຜູ້ສອນສາດສະໜາເພື່ອລາຍງານຂໍ້ມູນຕໍ່ຜູ້ນຳທ້ອງຖິ່ນ. ຜູ້ນຳທ້ອງຖິ່ນຈະຂຽນຊື່ຂອງຄູ່ສອນສາດສະໜາແຕ່ລະຄູ່ໃນທ້ອງຖິ່ນຂອງລາວໃສ່ໃນໃບສະຫລຸບລາຍງານທາງໂທລະສັບ ພ້ອມກັບຈຳນວນທັງໝົດຂອງເຂົາເຈົ້າສຳລັບຈຸດຊີ້ບອກແຕ່ລະຈຸດ. ແລ້ວລາວຈະຮວມຜົນງານຂອງທ້ອງຖິ່ນເຂົ້າກັນຢູ່ຂ້າງລຸ່ມ. ຂໍ້ມູນຈະຖືກລາຍງານແຕ່ຂັ້ນ ຈາກຂັ້ນລຸ່ມຂຶ້ນໄປຫາຂັ້ນເທິງ. ຜູ້ນຳທ້ອງຖິ່ນຈະລາຍງານຈຳນວນທັງໝົດຂອງທ້ອງຖິ່ນຕໍ່ຜູ້ນຳເຂດ. ຜູ້ນຳເຂດຈະລາຍງານຈຳນວນທັງໝົດຂອງເຂດຕໍ່ຜູ້ລອງປະທານ. ຜູ້ລອງປະທານຈະລາຍງານຈຳນວນທັງໝົດຂອງການເຜີຍແຜ່ຕໍ່ປະທານເຜີຍແຜ່.



**ປະຕິທິນປະຈຳວັນຂອງຜູ້ສອນສາດສະໜາ:** ອຸບປະກອນນີ້ຮ່ວມດ້ວຍຈຸດດັ່ງຕໍ່ໄປນີ້:

- ຕາຕະລາງປະຈຳວັນສຳລັບໜຶ່ງອາທິດ, ພ້ອມທັງອາທິດທີເຈັດຢູ່ໃນໜ້າທີ່ຄົ້ນຫາເຫັນໄດ້ໄວ.
- ໜ້າສຳລັບເປົ້າໝາຍປະຈຳອາທິດ.
- ບົດສະຫລຸບຂໍ້ແນະນຳການວາງແຜນ; ລາຍການກິດຈະກຳທີ່ນຳໄປສູ່ການຮັບບັບຕິດສະມາ, ການຢືນຢັນ, ແລະ ການເຂັ້ມແຂງໃນສາດສະໜາຈັກ; ແຜນບົດຮຽນຂອງຜູ້ສອນສາດສະໜາ; ແນວຄິດເຖິງການຊອກຫາຄົນເພື່ອຈະສອນ; ແລະ ຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ.
- ພາກສຳລັບຂໍ້ມູນຂອງຜູ້ຄົນທີ່ຈະຕິດຕໍ່ ແລະ ສຳລັບທີ່ຢູ່ ແລະ ເລກໂທລະສັບຂອງຜູ້ສົນໃຈ ແລະ ຂອງສະມາຊິກ.
- ໃບສະຫລຸບລາຍງານທາງໂທລະສັບເພື່ອຈົດຜົນງານປະຈຳອາທິດຂອງທ່ານໄວ້.

ໃນເວລາວາງແຜນປະຈຳອາທິດຂອງທ່ານ, ທ່ານຈະຂຽນເປົ້າໝາຍປະຈຳອາທິດຂອງທ່ານ ໃສ່ໜ້າເປົ້າໝາຍປະຈຳອາທິດໃນປະຕິທິນປະຈຳວັນຂອງຜູ້ສອນສາດສະໜາ ຕາມທີ່ສະແດງໄວ້ຢູ່ຂ້າງລຸ່ມ.

- ເປົ້າໝາຍປະຈຳອາທິດສຳລັບຈຸດຊີ້ບອກແຕ່ລະຈຸດ.
- ຜົນງານໃນອາທິດຕາມຄວາມເປັນຈິງ. ຜົນງານສຳລັບແຕ່ລະວັນກໍພົບເຫັນຢູ່ໃນຕາຕະລາງປະຈຳວັນຄືກັນ. ຈຳນວນທັງໝົດແຕ່ລະອາທິດຈະຖືກຍ້າຍມາໃສ່ບ່ອນນີ້.




- ຊື່ຂອງຜູ້ຄົນທີ່ອາດຈະຊ່ວຍທ່ານໃຫ້ສຳເລັດເປົ້າໝາຍຂອງທ່ານໄດ້ (ຜູ້ສົນໃຈທີ່ກຳລັງກ້າວໜ້າ, ຜູ້ສົນໃຈໃໝ່). ໃຫ້ຈັດຕັ້ງເປົ້າໝາຍສິ່ງທີ່ທ່ານຫວັງຢາກໃຫ້ເກີດຂຶ້ນກັບຜູ້ຄົນເຫລົ່ານີ້ ຄື (ໄປໂບດ, ອ່ານພະຄຳພີມໍມອນ, ຕັ້ງວັນທີຮັບບັບຕິດສະມາ, ແລະ ອື່ນໆ).
- ບ່ອນຫວ່າງເພື່ອຂຽນເປົ້າໝາຍສ່ວນຕົວ ຫລື ເປົ້າໝາຍກັບຄູ່ສອນສາດສະໜາ.

ໝາຍເຫດ

ໝາຍເຫດ

ແຕ່ລະມື້ເມື່ອທ່ານວາງແຜນ ແລະ ອອກເຜີຍແຜ່, ທ່ານຈະໃຊ້ຕາຕະລາງປະຈຳວັນ ຕາມທີ່ສະແດງໄວ້ຢູ່ຂ້າງລຸ່ມ.

- ຕາຕະລາງປະຈຳວັນບ່ອນທີ່ທ່ານສາມາດບັນທຶກການນັດສອນ, ການປະຊຸມ, ແລະ ກິດຈະກຳຂອງການຊອກຫາຄົນເພື່ອສອນ. ໃຫ້ວາງແຜນເພື່ອທ່ານຈະມີກິດຈະກຳທີ່ມີປະໂຫຍດທີ່ຈະເຮັດສຳລັບທຸກໆຊົ່ວໂມງ ແຕ່ລະມື້. ພ້ອມນີ້ກໍມີບ່ອນຫວ່າງໄວ້ເພື່ອແຜນການສຳລອງອື່ນໆນຳອີກ.
- ບ່ອນຫວ່າງເພື່ອຈົດວຽກງານທີ່ທ່ານຕ້ອງເຮັດ (ໂທລະສັບ, ຜູ້ຄົນທີ່ຈະຕິດຕໍ່, ການຕຽມສອນບົດຮຽນ, ການຕິດຕາມເບິ່ງຜົນຂອງຄຳໝັ້ນສັນຍາ, ແລະ ອື່ນໆ).




- ບ່ອນຫວ່າງເພື່ອບັນທຶກສິ່ງທີ່ທ່ານຈະສຶກສາ ເມື່ອທ່ານຕຽມພ້ອມສຳລັບການນັດສອນ.
- ເປົ້າໝາຍປະຈຳວັນ ແລະ ຜົນງານຕາມຄວາມເປັນຈິງສຳລັບຈຸດຊີ້ບອກທີ່ໄດ້ເລືອກໄວ້.

**ໃບລາຍງານປະຈຳອາທິດຂອງຜູ້ສອນສາດສະໜາ:** ໃບລາຍງານນີ້ໃຫ້ໂອກາດທ່ານທີ່ຈະອະທິບາຍໂດຍກົງຕໍ່ປະທານເຜີຍແຜ່ ເຖິງຄວາມພະຍາຍາມໃນການເຜີຍແຜ່ຂອງທ່ານ ແລະ ເຖິງເລື່ອງສ່ວນຕົວທີ່ທ່ານຢາກຈະບອກໃຫ້ເພິ່ນຊາບ. ເມື່ອທ່ານຂຽນຈົດໝາຍນີ້, ໃຫ້ສະຫລຸບເລື່ອງຢ່າງຊັດເຈນ, ແຕ່ບໍ່ຕ້ອງຄິດວ່າທ່ານຕ້ອງຂຽນໃຫ້ເຕັມບ່ອນຫວ່າງ. ເພິ່ນຈະເປັນຜູ້ອ່ານຈົດໝາຍນີ້ຜູ້ດຽວ, ສະນັ້ນໃຫ້ເປີດເຜີຍຄວາມຄິດເຫັນຂອງທ່ານຢ່າງສະບາຍໃຈ.



ໝາຍເຫດ

## ວິທີຈັດຕັ້ງເປົ້າໝາຍ

ເປົ້າໝາຍຈະບອກເຖິງຄວາມປາດຖະໜາໃນຫົວໃຈຂອງເຮົາ ແລະ ຄວາມເຂົ້າໃຈເຖິງສິ່ງທີ່ເຮົາສາມາດເຮັດໃຫ້ສຳເລັດ. ຜ່ານທາງເປົ້າໝາຍ ແລະ ແຜນການ, ຄວາມຫວັງຂອງເຮົາໄດ້ຖືກປ່ຽນເປັນການກະທຳ. ການຈັດຕັ້ງ ແລະ ການວາງແຜນເປົ້າໝາຍ ແມ່ນການກະທຳທາງສັດທາ. ໃຫ້ຈັດຕັ້ງເປົ້າໝາຍດ້ວຍການອະທິຖານທີ່ສອດຄ່ອງກັບຄຳບັນຊາຂອງພະຜູ້ຊ່ອຍໃຫ້ລອດທີ່ວ່າ "ຈົ່ງສອນຄົນທຸກຊາດ, ໃຫ້ເຂົາຮັບບັບຕິສະມາໃນພະນາມຂອງພະບິດາ, ແລະ ຂອງພະບຸດ, ແລະ ຂອງພະວິນຍານບໍລິສຸດ" (ມັດທາຍ 28:19).

ຈົ່ງຈັດຕັ້ງເປົ້າໝາຍສຳລັຈຸດຊີ້ບອກແຕ່ລະຈຸດ. ທ່ານຄວນຈັດຕັ້ງເປົ້າໝາຍສຳລັບການພັດທະນາສ່ວນຕົວນຳອີກ. ໃຫ້ເຮັດທຸກສິ່ງຈົນສຸດອຳນາດຂອງທ່ານເພື່ອເຮັດໃຫ້ເປົ້າໝາຍຂອງທ່ານບັນລຸຄວາມສຳເລັດ ແລະ ໃນເວລາດຽວກັນນັ້ນໃຫ້ນັບຖືອິດສະລະຂອງຜູ້ອື່ນ. ຈຸດວັດແທກສູງສຸດຂອງຄວາມສຳເລັດບໍ່ຂຶ້ນຢູ່ກັບການບັນລຸຜົນເປົ້າໝາຍເທົ່ານັ້ນ ແຕ່ຂຶ້ນຢູ່ກັບການຮັບໃຊ້ທີ່ທ່ານໄດ້ເຮັດລົງໄປ ແລະ ໃນຄວາມກ້າວໜ້າຂອງຜູ້ຄົນທີ່ທ່ານສອນ. ເປົ້າໝາຍເປັນສິ່ງທີ່ຊ່ອຍທ່ານນຳຄວາມດີມາໃຫ້ລູກໆຂອງພະບິດາເທິງສະຫວັນ ບໍ່ແມ່ນໃຊ້ມັນເພື່ອຮັບເອົາຄວາມຍ້ອງຍໍສັນລະເສີນ.

> *"ຂ້າພະເຈົ້າໝັ້ນໃຈວ່າ ຖ້າຫາກເຮົາບໍ່ຈັດຕັ້ງເປົ້າໝາຍໃນຊີວິດຂອງເຮົາ ແລະ ຮຽນຮູ້ວິທີທີ່ຈະຄວບຄຸມການດຳລົງຊີວິດເພື່ອບັນລຸເປົ້າໝາຍຂອງເຮົາ, ແລ້ວເມື່ອເຮົາເຖົ້າແກ່ລົງ ແລະ ຫວນຄິດຄືນຫລັງທົບທວນເບິ່ງຊີວິດຂອງເຮົາ ແລ້ວເຮົາຈະເຫັນວ່າ ເຮົາໄດ້ບັນລຸພຽງນ້ອຍດຽວເທົ່ານັ້ນ ໃນຄວາມສາມາດອັນເຕັມສ່ວນຂອງເຮົາ. ເມື່ອຜູ້ໃດຮຽນຮູ້ວິທີທີ່ຈະຄວບຄຸມຫລັກທຳຂອງການຈັດຕັ້ງເປົ້າໝາຍ, ແລ້ວຜູ້ນັ້ນຈະສາມາດ ໄດ້ຮັບຜົນປະໂຫຍດດີຈາກຜົນງານທີ່ເຂົາໄດ້ສ້າງໄວ້ໃນຊີວິດນີ້."*
>
> – ແອວເດີ ເອັມ ລັດໂຊ ບາເລີດ
>
> ຄຳປາໄສຕໍ່ຄົນໜຸ່ມໃນເຂດເມືອງ ເຊົາເລັກ, ວັນທີ 18 ເດືອນ ຕຸລາ, ປີ 1981

ເປົ້າໝາຍທີ່ຖືກໄຕ່ຕອງເປັນຢ່າງດີຈະໃຫ້ການຊີ້ນຳທາງທີ່ຊັດເຈນແກ່ທ່ານ ແລະ ຈະຊ່ອຍທ່ານເຮັດໃຫ້ວັນເວລາຂອງທ່ານເຕັມໄປດ້ວຍກິດຈະກຳທີ່ຈະຊ່ອຍຜູ້ຄົນໃຫ້ພັດທະນາສັດທາຂອງເຂົາໃນພະຜູ້ຊ່ອຍໃຫ້ລອດ ແລະ ກ້າວໜ້າໄປສູ່ບັບຕິສະມາ, ການຢືນຢັນ, ແລະ ເປັນສະມາຊິກທີ່ເຂັ້ມແຂງໃນສາດສະໜາຈັກ. ເປົ້າໝາຍທີ່ທ້າທາຍຈະຊ່ອຍທ່ານໃຫ້ເຮັດວຽກຢ່າງມີຜົນ ແລະ ນຳພາທ່ານໃຫ້ກ້າວໜ້າ ແລະ ເຕີບໂຕ. ໃຫ້ຕິດຕາມຂໍ້ແນະນຳຢູ່ຂ້າງລຸ່ມ ເມື່ອທ່ານຈັດຕັ້ງເປົ້າໝາຍ:

- ເຮັດຕາມພະວິນຍານ.
- ເອົາໃຈໃສ່ຕໍ່ຈຸດຊີ້ບອກ.
- ເອົາໃຈໃສ່ຕໍ່ຜູ້ຄົນ. ເຖິງແມ່ນວ່າທ່ານຈະໃຊ້ຕົວເລກ, ແຕ່ໃຫ້ສາມາດສະໜັບສະໜູນຕົວເລກຂອງທ່ານ ດ້ວຍຊື່ຂອງຄົນຖ້າຫາກເປັນໄປໄດ້.
- ໃຫ້ເຈາະຈົງ ແລະ ຄິດຕາມຄວາມເປັນຈິງ, ແຕ່ໃຫ້ຈັດຕັ້ງເປົ້າໝາຍທີ່ຈະເຮັດໃຫ້ທ່ານກ້າວໜ້າ.
- ໃຫ້ຈັດຕັ້ງເປົ້າໝາຍປະຈຳອາທິດ ແລະ ປະຈຳວັນ.
- ໃຫ້ຈັດຕັ້ງເປົ້າໝາຍສຳລັບການສຶກສາສ່ວນຕົວ ແລະ ການສຶກສາກັບຄູ່ສອນສາດສະໜາ, ຮ່ວມດ້ວຍການສຶກສາພາສາຖ້າຫາກທ່ານກຳລັງຮຽນພາສາອື່ນ.
- ໃຫ້ວັດແທກຄວາມກ້າວໜ້າຂອງທ່ານແຕ່ລະມື້, ແຕ່ລະອາທິດ, ແລະ ຫລັງຈາກແຕ່ລະຊ່ວງລະຍະຫົກອາທິດ. ເມື່ອທ່ານບໍ່ປະສົບຜົນສຳເລັດເປົ້າໝາຍ, ໃຫ້ຊັ່ງຊາຄວາມພະຍາຍາມຂອງທ່ານ ແລະ ໃຫ້ຊອກຫາທາງເພື່ອເຮັດໃຫ້ເປົ້າໝາຍບັນລຸຄວາມສຳເລັດ. ຖ້າຫາກຈຳເປັນ, ໃຫ້ປ່ຽນແປງຄວາມຄາດໝາຍຂອງທ່ານ.

ເມື່ອຄົນໄປປະທານເຜີຍແຜ່ຂອງທ່ານອາດຈະຕັ້ງມາດຕະຖານຄວາມດີເດັ່ນ ຫລື ເປົ້າໝາຍການເຜີຍແຜ່ເພື່ອຈະຍົກເປົ້າໝາຍຂອງທ່ານໃຫ້ສູງຂຶ້ນ ແລະ ເພີ່ມສັດທາຂອງທ່ານ. ມາດຕະຖານຂອງທ້ອງຖິ່ນ, ເຂດ, ແລະ ໂຄງການເຜີຍແຜ່ຈະຊ່ອຍທ່ານໃຫ້ກ້າວໜ້າ, ເຮັດວຽກຢ່າງມີຜົນດີ, ແລະ ບັນລຸການປະຕິບັດໃນລະດັບສູງ. ມາດຕະຖານເຫລົ່ານີ້ບໍ່ຄວນຖືກໃຊ້ເປັນຈຳນວນເປົ້າໝາຍທີ່ທ່ານ ແລະ ຄູ່ສອນສາດສະໜາຂອງທ່ານ ຕ້ອງເຮັດໃຫ້ໄດ້.

ໝາຍເຫດ

**ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ**

ໃຫ້ຈັດຕັ້ງເປົ້າໝາຍສຳລັບຈຸດຊີ້ບອກແຕ່ລະຈຸດ. ສຳລັບເປົ້າໝາຍແຕ່ລະຂໍ້, ໃຫ້ຖາມຕົນເອງວ່າ:

- ມີຊື່ໃດບໍ່ທີ່ກ່ຽວພັນກັບຕົວເລກ?
- ເປົ້າໝາຍນັ້ນເຈາະຈົງບໍ?
- ເປົ້າໝາຍນັ້ນແມ່ນຕາມຄວາມເປັນຈິງບໍ?
- ເປົ້າໝາຍນັ້ນຈະເຮັດໃຫ້ເຮົາກ້າວໜ້າບໍ?
- ເຮົາຈິງຈັງກັບເປົ້າໝາຍນັ້ນບໍ?

ໃຫ້ສົນທະນາເປົ້າໝາຍແຕ່ລະຂໍ້. ຖ້າຫາກຈຳເປັນ, ໃຫ້ຄິດຫາວິທີທາງທີ່ທ່ານອາດຈະປ່ຽນມັນ ແລະ ເປັນຫຍັງ.

## ການວາງແຜນປະຈຳອາທິດ

ຫລັງຈາກທ່ານໄດ້ຈັດຕັ້ງເປົ້າໝາຍແລ້ວ, ໃຫ້ຕັດສິນໃຈກ່ຽວກັບວິທີທີ່ທ່ານຈະເຮັດມັນ ໃຫ້ສຳເລັດ. ທ່ານ ແລະ ຄູ່ສອນສາດສະໜາຂອງທ່ານ ຄວນຈັດການວາງແຜນປະຈຳອາທິດໃນວັນ ແລະ ໃນເວລາທີ່ການເລາະເຜີຍແຜ່ບໍ່ໄດ້ຜົນປານໃດ, ເຊັ່ນໃນຕອນເຊົ້າວັນພະຫັດ ຫລື ວັນສຸກ. ປະທານເຜີຍແຜ່ຂອງທ່ານຈະຈັດຕັ້ງວັນ ແລະ ເວລາຂອງການວາງແຜນປະຈຳອາທິດ. ການວາງແຜນປະຈຳອາທິດນີ້ອາດຈະໃຊ້ເວລາສອງຫາສາມຊົ່ວໂມງຈຶ່ງຈະສຳເລັດ.

ການສົນທະນາຂອງທ່ານຄວນຈະແນໃສ່ຄວາມຕ້ອງການຂອງຜູ້ຄົນ ແລະ ວິທີທີ່ຈະຊ່ອຍເຂົາໃຫ້ກ້າວໜ້າ. ໃນຂະນະທີ່ວາງແຜນປະຈຳອາທິດ, ໃຫ້ທົບທວນເປົ້າໝາຍເກົ່າ ແລະ ຈັດຕັ້ງເປົ້າໝາຍໃໝ່ສຳລັບອາທິດທີ່ຈະມາເຖິງ. ໃຫ້ພິຈາລະນາການເຜີຍແຜ່ຂອງທ່ານໃນທຸກໆດ້ານ.

ຕອນແລງວັນອາທິດເປັນເວລາທີ່ໄດ້ແນະນຳໃຫ້ລາຍງານປະຈຳອາທິດທາງໂທລະສັບ. ການລາຍງານຕອນແລງວັນອາທິດເປັນເວລາທີ່ຖືກຕ້ອງ ແລະ ເໝາະສົມທີ່ສຸດ ເພາະວ່າສ່ວນຫລາຍແລ້ວ ການບັບຕິດສະມາ ແລະ ການຢືນຢັນຈະເກີດຂຶ້ນໃນວັນເສົາ ຫລື ວັນອາທິດ.

ເພາະວ່າວັນທີ່ທ່ານວາງແຜນປະຈຳອາທິດຈະບໍ່ແມ່ນວັນດຽວກັນກັບວັນລາຍງານຂອງທ່ານ, ສະນັ້ນເມື່ອທ່ານວາງແຜນປະຈຳອາທິດ ທ່ານຄວນຄິດໄລ່ເຖິງສິບມື້. ຕົວຢ່າງເຊັ່ນ, ຖ້າຫາກວ່າການວາງແຜນປະຈຳອາທິດຂອງທ່ານແມ່ນວັນພະຫັດ, ທ່ານຈະທົບທວນຄວາມກ້າວໜ້າຂອງເປົ້າໝາຍສຳລັບອາທິດນັ້ນ, ແລະ ທ່ານຍັງຕ້ອງໄດ້ວາງແຜນສິ່ງທີ່ທ່ານຈະຕ້ອງເຮັດໃຫ້ສຳເລັດຈາກວັນນັ້ນ ຕະຫລອດເຖິງວັນອາທິດນຳອີກ. ແລ້ວ, ໃຫ້ຈັດຕັ້ງເປົ້າໝາຍ ແລະ ວາງແຜນສຳລັບອາທິດໜ້າຈາກວັນຈັນຫາວັນອາທິດ. ໃນຕອນແລງວັນອາທິດ ທ່ານຈະຮວບຮວມຈຳນວນ ແລະ ລາຍງານຜົນງານຈາກອາທິດທີ່ຜ່ານມາ, ແລະ ທ່ານມີແຜນຕຽມໄວ້ຮຽບຮ້ອຍສຳລັບອາທິດທີ່ຈະມາເຖິງ. ຢູ່ຂ້າງລຸ່ມແມ່ນຄຳອະທິບາຍເຖິງວິທີທີ່ຂໍແນະນຳສຳລັບການວາງແຜນກ່ຽວພັນກັບການວາງແຜນປະຈຳອາທິດແນວໃດ.

1. **ອະທິຖານ ແລະ ສະແຫວງຫາການດົນໃຈ.** ກ່ອນທ່ານເລີ່ມຕົ້ນ, ໃຫ້ມີປະຕິທິນປະຈຳວັນຂອງຜູ້ສອນສາດສະໜາ ແລະ ປຶ້ມບັນທຶກປະຈຳເຂດຢູ່ໃກ້. ໃຫ້ເລີ່ມການວາງແຜນຂອງທ່ານດ້ວຍການອະທິຖານ. ໃຫ້ສະແຫວງຫາການດົນໃຈເມື່ອທ່ານສົນທະນາເຖິງຄວາມຕ້ອງການຂອງຜູ້ຄົນ ແລະ ວາງແຜນທີ່ຈະຮັບໃຊ້ເຂົາແບບໃດ ແລະ ຊ່ອຍເຂົາໃຫ້ກ້າວໜ້າໃນພະກິດຕິຄຸນແນວໃດ. ໃຫ້ອະທິຖານຢ່າງເຈາະຈົງເພື່ອຜູ້ສົນໃຈຂອງທ່ານ. ຈົ່ງມີສັດທາເມື່ອທູນຂໍໃຫ້ພະບິດາເທິງສະຫວັນໃຫ້ພອນແກ່ເຂົາດ້ວຍຄຳຕອບຕໍ່ການອະທິຖານຂອງເຂົາ, ໃຫ້ເຂົາມີຄວາມປາດຖະໜາຢາກໄປໂບດ, ແລະ ອື່ນໆ.

2. **ຈັດຕັ້ງເປົ້າໝາຍ ແລະ ວາງແຜນໃຫ້ຜູ້ສົນໃຈຮັບບັບຕິດສະມາ ແລະ ຮັບການຢືນຢັນໃນອາທິດທີ່ຈະມາເຖິງ.** ໃຫ້ທົບທວນບັນທຶກການສອນສຳລັບແຕ່ລະຄົນທີ່ໄດ້ເຮັດຄຳໝັ້ນສັນຍາທີ່ຈະຮັບບັບຕິດສະມາ ຫລື ຮັບການຢືນຢັນໃນອາທິດທີ່ຈະມາເຖິງ. ໃຫ້ສົນທະນາເຖິງສິ່ງທີ່ທ່ານຕ້ອງເຮັດ ສຳລັບການສຳພາດກ່ອນບັບຕິດສະມາ, ພິທີ, ແລະ ການຢືນຢັນ. ດ້ວຍການໃຊ້ບັນທຶກການສອນ, ໃຫ້ສົນທະນາເຖິງຄຳໝັ້ນສັນຍາໃດໆທີ່ຜູ້ຄົນຍັງຮັກສາບໍ່ໄດ້ເທື່ອ ແລະ ເຖິງວິທີທີ່ທ່ານຈະສາມາດຊ່ອຍເຂົາໄດ້. ແລ້ວໃຫ້ວາງແຜນເພື່ອຈະຕິດຕໍ່ກັບເຂົາທຸກມື້. ໃຫ້ສົນທະນາວິທີທີ່ທ່ານຈະສາມາດຊ່ອຍຜູ້ນຳເຜີຍແຜ່ຂອງຫວອດ ປະສານງານກັບອະທິການເລື່ອງການຢືນຢັນຂອງເຂົາໃນກອງປະຊຸມສິນລະລຶກ.

ໝາຍເຫດ

3. **ຈັດຕັ້ງເປົ້າໝາຍ ແລະ ວາງແຜນເພື່ອຜູ້ສົນໃຈທີ່ໄດ້ຕັ້ງວັນທີເພື່ອຮັບບັບຕິສະມາ.** ໃຫ້ທົບທວນບັນທຶກການສອນສຳລັບແຕ່ລະຄົນທີ່ຈະຮັບບັບຕິສະມາໃນສອງສາມອາທິດທີ່ຈະມາເຖິງ. ໃຫ້ລົມກັນກ່ຽວກັບບົດຮຽນທີ່ທ່ານຕ້ອງສອນເຂົາ. ໃຫ້ພິຈາລະນາວິທີທີ່ທ່ານຈະສາມາດຊ່ອຍເຂົາໃຫ້ຕຽມພ້ອມຕໍ່ການຮັບບັບຕິສະມາ ແລະ ການຢືນຢັນ. ໃຫ້ສົນທະນາກ່ຽວກັບຜູ້ສົນໃຈທີ່ບໍ່ໄດ້ຮັບບັບຕິສະມາໃນວັນທີ່ເຂົາຕັ້ງໄວ້. ໃຫ້ພິຈາລະນາ ແລະ ສົນທະນາຢ່າງລະອຽດເຖິງຄວາມຕ້ອງການຂອງເຂົາ. ໃຫ້ຈັດຕັ້ງເປົ້າໝາຍໃໝ່ ແລະ ວາງແຜນອັນທີ່ຈະຊ່ອຍເຂົາກ້າວໜ້າໄປສູ່ວັນ ແລະ ເວລາທີ່ເຂົາຈະເຂົ້າໄປສູ່ພັນທະສັນຍາຂອງການຮັບບັບຕິສະມາ ແລະ ຮັບເອົາພິທີການຢືນຢັນ. ໃນບັນທຶກການສອນ, ໃຫ້ໃຊ້ສໍຄຳໝາຍຫລັກທຳທີ່ທ່ານວາງແຜນຈະສອນ ແລະ ຄຳໝັ້ນສັນຍາທີ່ທ່ານຈະຊ່ອຍໃຫ້ເຂົາຮັກສາ. ໃຫ້ພິຈາລະນາສິ່ງທີ່ທ່ານຈະສາມາດເຮັດໄດ້ເພື່ອຊ່ອຍໃຫ້ເຂົາຮັບຮຽນບົດຮຽນ ແລະ ຮັກສາຄຳໝັ້ນສັນຍາເຫລົ່ານີ້.

4. **ຈັດຕັ້ງເປົ້າໝາຍ ແລະ ວາງແຜນເພື່ອຊ່ອຍໃຫ້ຜູ້ສົນໃຈເຂົ້າຮ່ວມກອງປະຊຸມສິນລະລຶກ.** ໃຫ້ທົບທວນບັນທຶກການສອນສຳລັບຜູ້ສົນໃຈແຕ່ລະຄົນ, ແລະ ສົນທະນາກ່ຽວກັບການໄປຮ່ວມກອງປະຊຸມສິນລະລຶກຂອງເຂົາ. ສຳລັບຜູ້ສົນໃຈທີ່ໄປຮ່ວມກອງປະຊຸມສິນລະລຶກເປັນປະຈຳ, ໃຫ້ສົນທະນາວ່າ ທ່ານຈະສາມາດເຮັດຫຍັງໄດ້ແດ່ ເພື່ອຊ່ອຍໃຫ້ເຂົາມີປະສົບທາງວິນຍານຕໍ່ໄປ. ສຳລັບຜູ້ທີ່ບໍ່ເຄີຍໄດ້ໄປຮ່ວມກອງປະຊຸມສິນລະລຶກ, ຜູ້ທີ່ໄດ້ໄປຮ່ວມພຽງເທື່ອດຽວ, ຫລື ຜູ້ໄປຮ່ວມເປັນບາງຄັ້ງ, ໃຫ້ສົນທະນາວ່າ ແມ່ນຫຍັງທີ່ຂັດຂວາງບໍ່ໃຫ້ເຂົາໄປ. ຕົວຢ່າງເຊັ່ນ, ເຂົາອາດຕ້ອງການຄວາມຊ່ອຍເຫລືອທາງຍານພາຫະນະຮັບສົ່ງ, ບາງທີເຂົາອາດຢ້ານ ຫລື ບໍ່ລຶ້ງເຄີຍກັບການປະຊຸມຂອງສິດທິຊົນຍຸກສຸດທ້າຍ, ຫລື ບາງທີເຂົາໄດ້ມີປະສົບການທີ່ບໍ່ດີໃນອາດີດ. ໃຫ້ສົນທະນາເຖິງວິທີທີ່ທ່ານຈະສາມາດຊ່ອຍເຫລືອເຂົາໃຫ້ເອົາຊະນະອຸບປະສັກເຫລົ່ານີ້. ໃຫ້ຈັດຕັ້ງເປົ້າໝາຍຈຳນວນຜູ້ສົນໃຈທີ່ທ່ານຫວັງໃຫ້ໄປຮ່ວມກອງປະຊຸມສິນລະລຶກເທື່ອໜ້າ. ໃຫ້ວາງແຜນວ່າ ໃຜຈະໄປຮັບເອົາເຂົາໄປໂບດ, ໃຜຈະທັກທາຍເຂົາ, ແລະ ໃຜຈະນັ່ງນຳເຂົາໃນລະຫວ່າງກອງປະຊຸມ. ໃຫ້ວາງແຜນຕິດຕໍ່ຫາຜູ້ນຳກຸ່ມ ແລະ ອົງການຊ່ອຍເຫລືອ ແລະ ນາຍຄູທີ່ຮັບຜິດຊອບຫ້ອງຮຽນທີ່ຜູ້ສົນໃຈຈະເຂົ້າຮ່ວມ. ໃຫ້ວາງແຜນເພື່ອບອກໃຫ້ອະທິການຮູ້. ໃນບັນທຶກຄວາມກ້າວໜ້າ, ໃຫ້ຂຽນສິ່ງທີ່ສະພາຫວອດຈະສາມາດຊ່ອຍໄດ້. ໃຫ້ວາງແຜນສິ່ງທີ່ທ່ານຕ້ອງເຮັດແຕ່ລະມື້ໃນອາທິດນັ້ນ ເພື່ອຕຽມຄົນເຫລົ່ານີ້ໃຫ້ໄປໂບດ.



5. **ຈັດຕັ້ງເປົ້າໝາຍ ແລະ ວາງແຜນສຳລັບບົດຮຽນທີ່ຈະສອນໃຫ້ຜູ້ສົນໃຈທີ່ກຳລັງກ້າວໜ້າ.** ໃຫ້ທົບທວນບັນທຶກການສອນສຳລັບຜູ້ສົນໃຈທີ່ກຳລັງກ້າວໜ້າແຕ່ລະຄົນທີ່ຖືກສອນໂດຍມີສະມາຊິກຢູ່ນຳ. ໃຫ້ລົມກັນເຖິງຄວາມຮູ້ສຶກຂອງທ່ານກ່ຽວກັບວ່າເຂົາຮັບຮູ້ຂ່າວສານແນວໃດ. ໃຫ້ທົບທວນຄຳໝັ້ນສັນຍາ ແລະ ເຫດການຈາກບັນທຶກການສອນທີ່ເຂົາພະຍາຍາມຮັກສາ ຫລື ເຮັດໃຫ້ສຳເລັດ. ໃຫ້ສົນທະນາວິທີທີ່ຈະຊ່ອຍສະມາຊິກໃນຫວອດ ແລະ ສະພາຫວອດ ໃຫ້ພົວພັນໃນຄວາມກ້າວໜ້າຂອງເຂົາ. ໃຫ້ຈັດຕັ້ງເປົ້າໝາຍສຳລັບບົດຮຽນທີ່ທ່ານຈະສອນ; ຄຳໝັ້ນສັນຍາທີ່ທ່ານຈະຊ່ອຍເຂົາໃຫ້ຮັກສາ, ໂດຍສະເພາະ ການໄປໂບດ; ແລະ ປະສົບການສຳຄັນທີ່ທ່ານຈະຊ່ອຍໃຫ້ເຂົາມີພາຍໃນສອງສາມອາທິດຂ້າງໜ້າ.

ໃຫ້ທົບທວນບັນທຶກການສອນສຳລັບຜູ້ສົນໃຈທີ່ກຳລັງກ້າວໜ້າແຕ່ລະຄົນ ທີ່ຖືກສອນໂດຍບໍ່ມີສະມາຊິກຢູ່ນຳ. ຜູ້ສົນໃຈເຫລົ່ານີ້ອາດເປັນຜູ້ຄົນທີ່ທ່ານຫາໄດ້ດ້ວຍຄວາມພະຍາຍາມຂອງທ່ານເອງ. ໃຫ້ສົນທະນາວ່າຈະເຊື້ອເຊີນຜູ້ນຳຖານະປະໂລຫິດ ຫລື ຜູ້ນຳອົງການຊ່ອຍເຫລືອຄົນໃດໃຫ້ຜູກມິດກັບເຂົາ. ໃຫ້ທົບທວນບົດຮຽນທີ່ທ່ານຈະສອນ ແລະ ຄຳໝັ້ນສັນຍາທີ່ທ່ານຈະຊ່ອຍໃຫ້ເຂົາຮັກສາ. ໃຫ້ຈັດຕັ້ງເປົ້າໝາຍສຳລັບບົດຮຽນທີ່ທ່ານຈະສອນ, ວິທີທີ່ທ່ານຈະໃຫ້ສະມາຊິກມີສ່ວນກ່ຽວຂ້ອງ, ແລະ ວິທີທີ່ທ່ານຈະຊ່ອຍຜູ້ສົນໃຈເຫລົ່ານີ້ໃຫ້ໄປຮ່ວມກອງປະຊຸມສິນລະລຶກ. ໃຫ້ບັນທຶກເປົ້າໝາຍເຫລົ່ານີ້ໄວ້ໃນບັນທຶກການສອນ, ແລະ ໃຫ້ວາງແຜນທີ່ຈຳເປັນ.

6. **ຈັດຕັ້ງເປົ້າໝາຍ ແລະ ວາງແຜນສຳລັບບົດຮຽນທີ່ຈະສອນໃຫ້ຜູ້ສົນໃຈຄົນອື່ນໆທຸກຄົນ.** ໃຫ້ທົບທວນບັນທຶກການສອນສຳລັບຜູ້ສົນໃຈແຕ່ລະຄົນທີ່ບໍ່ກ້າວໜ້າ. ໃຫ້ສົນທະນາວ່າເປັນຫຍັງຜູ້ສົນໃຈແຕ່ລະຄົນນີ້ ຈຶ່ງບໍ່ຮັກສາຄຳໝັ້ນສັນຍາຂອງເຂົາ. ໃຫ້ສົນທະນາວິທີທີ່ທ່ານຈະໃຫ້ຜູ້ນຳຖານະປະໂລຫິດ ແລະ ຜູ້ນຳອົງການຊ່ອຍເຫລືອຜູກມິດກັບ

ໝາຍເຫດ

ຜູ້ສົນໃຈເຫລົ່ານີ້. ໃຫ້ສົນທະນາເຖິງສິ່ງດຽວກັນນີ້ ທີ່ໄດ້ແນະນຳໄວ້ໃນຂໍ້ທີ 5. ໃຫ້ຈັດຕັ້ງເປົ້າໝາຍ ແລະ ວາງແຜນເພື່ອຊ່ອຍຜູ້ຄົນເຫລົ່ານີ້ໃຫ້ກ້າວໜ້າ. ໃຫ້ຂຽນເປົ້າໝາຍເຫລົ່ານີ້ໄວ້ໃນບັນທຶກການສອນ.

7. **ຈັດຕັ້ງເປົ້າໝາຍ ແລະ ວາງແຜນຕິດຕໍ່ ແລະ ສອນຜູ້ຖືກແນະນຳ ທີ່ໄດ້ຮັບຈາກສະມາຊິກ, ຜູ້ສົນໃຈ, ຜູ້ບໍ່ເປັນສະມາຊິກ, ແລະ ຈາກສູນກາງຂອງສາດສະໜາຈັກ.** ໃຫ້ທົບທວນເອກະສານຂອງຄົນທີ່ອາດຈະກາຍເປັນຜູ້ສົນໃຈ. ໃຫ້ທົບທວນຜູ້ຖືກແນະນຳທຸກຄົນທີ່ທ່ານໄດ້ຮັບ. ໃຫ້ທົບທວນຜູ້ຖືກແນະນຳທີ່ທ່ານຍັງບໍ່ໄດ້ຕິດຕໍ່ເທື່ອ. ໃຫ້ຈັດຕັ້ງເປົ້າໝາຍ ແລະ ວາງແຜນຕິດຕໍ່ຜູ້ຖືກແນະນຳຫລາຍຄົນເທົ່າທີ່ຈະເປັນໄປໄດ້ໃນອາທິດນັ້ນ—ດີແທ້ແມ່ນໃຫ້ຕິດຕໍ່ຜູ້ຖືກແນະນຳທຸກຄົນ. ຜູ້ຖືກແນະນຳຈາກສູນກາງຂອງສາດສະໜາຈັກຄວນຖືກຕິດຕໍ່ພາຍໃນ 24 ຊົ່ວໂມງ, ຖ້າຫາກເປັນໄປໄດ້. ໃຫ້ສົນທະນາວິທີທີ່ທ່ານຈະເຂົ້າຫາແຕ່ລະຄົນ ຫລືຄອບຄົວດ້ວຍວິທີໃດ ແລະ ທ່ານຈະສອນຂ່າວສານໃດ. ຖ້າຫາກຜູ້ຖືກແນະນຳມາຈາກສູນກາງຂອງສາດສະໜາຈັກ ໃຫ້ສົນທະນາວິທີທີ່ທ່ານຈະສອນຂ່າວສານດ້ວຍການໃຊ້ວີດີໂອ, ປຶ້ມ ຫລື ອຸປະກອນອື່ນໆທີ່ເຂົາໄດ້ຂໍຮ້ອງ. ໃຫ້ແນ່ໃຈວ່າທ່ານມີສິ່ງທີ່ເຂົາໄດ້ຂໍຮ້ອງ. ຖ້າເໝາະສົມ, ໃຫ້ຕິດຕໍ່ຜູ້ຖືກແນະນຳທາງໂທລະສັບ ແລະ ນັດເວລາໄປພົບ. ໃຫ້ສົນທະນາສິ່ງທີ່ທ່ານຈະຕິດຕາມເບິ່ງຕໍ່ໄປ.

8. **ຈັດຕັ້ງເປົ້າໝາຍ ແລະ ວາງແຜນເພື່ອຫາຜູ້ຖືກແນະນຳຈາກສະມາຊິກ, ຜູ້ສົນໃຈ, ແລະ ຜູ້ບໍ່ໄດ້ເປັນສະມາຊິກ.** ດ້ວຍການອະທິຖານໃຫ້ຈຳແນກສະມາຊິກ ແລະ ຜູ້ສົນໃຈຄົນອື່ນໆທີ່ທ່ານສາມາດໄປຢ້ຽມຢາມ. ໃຫ້ວາງແຜນວິທີທີ່ທ່ານຈະຊ່ອຍເຂົາ ໃຫ້ເຊື້ອເຊີນໝູ່ເພື່ອນ ແລະ ສະມາຊິກໃນຄອບຄົວເຂົາໃຫ້ຮຽນຮູ້ພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່. ໃຫ້ສົນທະນາວິທີທີ່ທ່ານຈະເຊື້ອເຊີນເຂົາໃຫ້ຮ່ວມມືໃນວຽກງານເຜີຍແຜ່. ໃຫ້ຈັດການນັດພົບ ແລະ ວາງແຜນທີ່ຈຳເປັນ.

9. **ຈັດຕັ້ງເປົ້າໝາຍ ແລະ ວາງແຜນສຳລັບບົດຮຽນທີ່ທ່ານຈະສອນໃຫ້ຜູ້ປ່ຽນໃຈເຫລື້ອມໃສໃນບໍ່ດົນມານີ້ ແລະ ສະມາຊິກທີ່ບໍ່ເຂັ້ມແຂງ.** ໃຫ້ທົບທວນບັນທຶກການສອນສຳລັບຜູ້ປ່ຽນໃຈເຫລື້ອມໃສໃນບໍ່ດົນມານີ້ ແລະ ສະມາຊິກທີ່ບໍ່ເຂັ້ມແຂງແຕ່ລະຄົນທີ່ທ່ານກຳລັງສອນ. ໃຫ້ຈັດຕັ້ງເປົ້າໝາຍ ແລະ ວາງແຜນສຳລັບບົດຮຽນທີ່ທ່ານຈະສອນ. ໃຫ້ພິຈາລະນາວ່າທ່ານຈະເຮັດວິທີໃດເພື່ອຊ່ອຍໃຫ້ຜູ້ຄົນເຫລົ່ານີ້ໄປຮ່ວມກອງປະຊຸມສິນລະລຶກ ແລະ ຮັກສາຄຳໝັ້ນສັນຍາອື່ນໆ.

10. **ຈັດຕັ້ງເປົ້າໝາຍ ແລະ ວາງແຜນຫາຜູ້ສົນໃຈໃໝ່.** ໃຫ້ທົບທວນຄວາມພະຍາຍາມເພື່ອຊອກຫາຜູ້ສົນໃຈໃໝ່ຜ່ານທາງການແນະນຳຊື່, ຈາກໂອກາດທີ່ໄດ້ຮັບໃຊ້, ແລະ ຈາກການຊອກຫາດ້ວຍຕົວເອງ ໃນອາທິດທີ່ຜ່ານມາ. ໃຫ້ກວດເບິ່ງຂໍ້ມູນຈາກພາກ "ຄົນທີ່ອາດຈະກາຍເປັນຜູ້ສົນໃຈ" ໃນປຶ້ມບັນທຶກປະຈຳເຂດຂອງທ່ານ. ໃຫ້ສົນທະນາວ່າເປັນຫຍັງບາງຄົນຈຶ່ງກາຍເປັນຜູ້ສົນໃຈໃໝ່ ແລະ ບາງຄົນບໍ່ໄດ້ເປັນ. ໃຫ້ຈັດຕັ້ງເປົ້າໝາຍວ່າທ່ານຈະຫາຜູ້ສົນໃຈໃໝ່ໄດ້ຈັກຄົນໃນອາທິດນີ້. ໃຫ້ຈຳແນກຄົນທີ່ອາດຈະກາຍເປັນຜູ້ສົນໃຈ. ພ້ອມນີ້ກໍໃຫ້ຈຳແນກສະມາຊິກ ແລະ ຄອບຄົວທີ່ບໍ່ເປັນສະມາຊິກທັງໝົດທີ່ທ່ານຢາກຢ້ຽມຢາມ, ຜູ້ຖືກແນະນຳທີ່ທ່ານຈະຕ້ອງໄປຢ້ຽມຢາມ, ແລະ ໂອກາດຮັບໃຊ້ທີ່ທ່ານຈະສະແຫວງເຮັດ. ໃຫ້ວາງແຜນວ່າທ່ານຈະໃຊ້ອຸປະກອນຊະນິດໃດ, ດັ່ງເຊັ່ນ ບັດແຈກຢາຍ, ວີດີໂອກາແຊັດ, ດີວີດີ, ພະຄຳພີ, ຫລືໃບໂຄສະນາ. ພ້ອມນີ້ໃຫ້ສົນທະນາກ່ຽວກັບບ່ອນທີ່ທ່ານຈະໄປເພື່ອຕິດຕໍ່ຫາຄົນ, ທ່ານຈະຕິດຕໍ່ຫາຈັກຄົນແຕ່ລະມື້, ຈຳນວນຜູ້ສົນໃຈທີ່ທ່ານຈະຂໍໃຫ້ຜູ້ຄົນແນະນຳ, ຜູ້ສົນໃຈເກົ່າທີ່ທ່ານຈະໄປຢ້ຽມຢາມ, ວິທີທີ່ສະພາຫວອດສາມາດຊ່ອຍໄດ້, ແລະ ອື່ນໆ. ໃຫ້ວາງແຜນໃດໜຶ່ງຢ່າງເຈາະຈົງສຳລັບມື້ຕໍ່ໄປ. ໃຫ້ໃຊ້ເວລາທີ່ເຫລືອຢູ່ເຮັດກິດຈະກຳຊອກຫາຄົນທີ່ຈະຊ່ອຍທ່ານໃຫ້ບັນລຸເປົ້າໝາຍຂອງທ່ານ. ໃຫ້ຈັດຕັ້ງເປົ້າໝາຍ ແລະ ວາງແຜນເວົ້ານຳຫລາຍໆຄົນເທົ່າທີ່ຈະເປັນໄປໄດ້, ຕາມທີ່ພະຜູ້ເປັນເຈົ້າຈະນຳມາວາງໄວ້ໃນເສັ້ນທາງຂອງທ່ານ. ໃຫ້ພະຍາຍາມຊອກຫາຄົນເພື່ອສອນສະເໝີ.

11. **ວາງແຜນທີ່ຈະເຮັດວຽກງານກັບສະພາຫວອດ.** ອະທິການເປັນເຈົ້າໜ້າທີ່ຄວບຄຸມ. ໃຫ້ນັບຖື ແລະ ໃຫ້ກຽດສິດອຳນາດຂອງເພິ່ນ. ພາຍໃຕ້ການຊີ້ນຳຂອງເພິ່ນ, ໃຫ້ທົບທວນບັນທຶກຄວາມກ້າວໜ້າ ທີ່ໃຊ້ໃນການປະຊຸມປະສານງານຂອງຜູ້ສອນສາດສະໜາ ຫລື ໃນການປະຊຸມສະພາຫວອດ. ໃຫ້ສົນທະນາການມອບໝາຍທີ່ທ່ານໄດ້ຮັບຈາກອະທິການ ຫລື ຈາກຜູ້ນຳເຜີຍແຜ່ປະຈຳຫວອດ, ແລະ ໃຫ້ລາຍງານວ່າທ່ານໄດ້ເຮັດສຳເລັດແລ້ວຫລືຍັງ. ໃຫ້ສົນທະນາວິທີທີ່ຈະໃຫ້ຜູ້ທີ່ສາມາດຊ່ອຍໄດ້ເຂົ້າພົວພັນແນວໃດ, ດັ່ງເຊັ່ນ ຜູ້ນຳເຜີຍແຜ່ປະຈຳຫວອດ, ຜູ້ນຳຖານະປະໂລຫິດ ແລະ ຜູ້ນຳອົງການຊ່ອຍເຫລືອ, ແລະ ສະມາຊິກຄົນອື່ນໆ. ໃຫ້ຕຽມບັນທຶກຄວາມກ້າວໜ້າຢ່າງລະອຽດສຳລັບການປະຊຸມສະພາຫວອດ, ການປະຊຸມກຳມະການບໍລິຫານງານຖານະປະໂລຫິດ, ຫລື ການປະຊຸມການປະສານງານຂອງຜູ້ສອນສາດສະໜາທີ່ຈະມາເຖິງ. ໃຫ້ແນ່ໃຈວ່າ ທ່ານຂຽນມັນຢ່າງແຈ່ມແຈ້ງ ແລະ ສະອາດ. ໃຫ້ຈັດຕັ້ງເປົ້າໝາຍ ແລະ ວາງແຜນທີ່ຈະເຮັດ

ໝາຍເຫດ

ວຽກງານຢ່າງສອດຄ່ອງກັບຜູ້ນຳຂອງຫວອດ. ເມື່ອເປັນໄປໄດ້, ໃຫ້ພິມໃບສຳເນົາບັນທຶກຄວາມກ້າວໜ້າໃຫ້ຜູ້ນຳຂອງຫວອດທີ່ຈະໄປຮ່ວມການປະຊຸມນັ້ນ.

12. **ຈັດຕາຕະລາງການປະຊຸມທີ່ຈະເກີດຂຶ້ນຕາມປົກກະຕິ.** ໃນປະຕິທິນປະຈຳວັນ ຂອງຜູ້ສອນສາດສະໜາຂອງທ່ານ, ໃຫ້ຈັດຕາຕະລາງການປະຊຸມທີ່ຈະເກີດຂຶ້ນຕາມປົກກະຕິ, ດັ່ງເຊັ່ນ ການປະຊຸມທ້ອງຖິ່ນ, ກອງປະ ຊຸມເຂດ, ການສຳພາດ, ແລະ ການປະຊຸມໂບດ. ໃຫ້ສົນທະນາການມອບໝາຍທີ່ທ່ານຕ້ອງເຮັດໃຫ້ສຳເລັດກ່ອນການປະຊຸມເຫລົ່ານີ້, ແລະ ໃຫ້ຂຽນມັນຕື່ມໃສ່ໜ້າ ໝາຍເຫດ/ສິ່ງທີ່ຈະເຮັດ ຂອງທ່ານ.

13. **ກວດກາເບິ່ງການເປັນຄູ່ສອນສາດສະໜາ.** ກ່ອນຈົບການວາງແຜນປະຈຳອາທິດຂອງທ່ານ, ໃຫ້ບອກຄູ່ສອນສາດສະໜາຂອງທ່ານກ່ຽວກັບເປົ້າໝາຍທີ່ເໝາະສົມ, ແລະ ຂໍໃຫ້ລາວຊ່ອຍທ່ານເຮັດມັນໃຫ້ສຳເລັດ. ໃຫ້ສົນທະນາຄວາມສຳພັນອັນເຂັ້ມແຂງຂອງທ່ານກັບຄູ່ສອນສາດສະໜາຂອງທ່ານ. ໃຫ້ສົນທະນາເຖິງການທ້າທາຍໃດໆທີ່ເຮັດໃຫ້ທ່ານກັບຄູ່ສອນສາດສະໜາຂອງທ່ານບໍ່ມີຄວາມສາມະຄີກັນ ຫລື ບໍ່ໄດ້ເຊື່ອຟັງ. ໃຫ້ແກ້ໄຂບັນຫານັ້ນ. ໃຫ້ບອກຄູ່ສອນສາດສະໜາຂອງທ່ານວ່າຈຸດເດັ່ນຂອງລາວຄືຫຍັງແດ່. ຂໍໃຫ້ລາວແນະນຳວິທີທີ່ທ່ານຈະພັດທະນາຕົນໃຫ້ດີຂຶ້ນ. ຖ້າຫາກຈຳເປັນ, ໃຫ້ຈັດຕັ້ງເປົ້າໝາຍທີ່ຈະພັດທະນາຄວາມສຳພັນຂອງການເປັນຜູ້ສອນສາດສະໜາຂອງທ່ານ. ໃຫ້ຈົບດ້ວຍການອະທິຖານ.

## ການວາງແຜນປະຈຳວັນ

ໃນທ້າຍຂອງແຕ່ລະວັນ ໃຫ້ຈັດການວາງແຜນ. ຖ້າຫາກທ່ານກຳລັງສອນບົດຮຽນ, ທ່ານອາດຈະຢູ່ຂ້າງນອກຈົນເຖິງ 9:30 ຕອນແລງ. ຖ້າບໍ່ດັ່ງນັ້ນ, ໃຫ້ກັບຄືນຫ້ອງພັກຂອງທ່ານຕອນ 9:00 ໂມງແລງ ແລະ ໃຫ້ຈັດການວາງແຜນປະຈຳວັນ ຈາກ 9:00 ໂມງຫາ 9:30 ຕອນແລງ. (ປະທານເຜີຍແຜ່ມີສິດທີ່ຈະປ່ຽນເວລາຕາມສະພາບການໃນທ້ອງຖິ່ນ.) ໃຫ້ໃຊ້ຫລັກທຳ ແລະ ຂໍ້ແນະນຳຂອງການວາງແຜນປະຈຳອາທິດດຽວກັນນັ້ນໃນການວາງແຜນປະຈຳວັນທີ່ທ່ານເຮັດ ແຕ່ໃນທາງທີ່ງ່າຍກວ່າ. ໃຫ້ມີການອະທິຖານເມື່ອທ່ານສົນທະນາບົດຮຽນ ຫລື ຫົວຂໍ້ທີ່ທ່ານຈະສຶກສາໃນເວລາສຶກສາສ່ວນຕົວ ຫລື ກັບຄູ່ສອນສາດສະໜາ ທີ່ຈະຊ່ອຍທ່ານໃນແຜນການຂອງທ່ານ. ໃຫ້ຂຽນຫົວຂໍ້ນີ້ລົງໄວ້ໃນບ່ອນທີ່ຈັດໄວ້ໃຫ້ໃນຕາຕະລາງປະຈຳວັນ. ທົບທວນຕາຕະລາງປະຈຳວັນຂອງທ່ານ. ໃຫ້ວາງແຜນເຮັດກິດຈະກຳທີ່ເປັນປະໂຫຍດສຳລັບທຸກໆຊົ່ວໂມງແຕ່ລະມື້. ໃນເວລາວາງແຜນໃນຕອນແລງວັນອາທິດ, ໃຫ້ຮວບຮວມຈຳນວນທັງໝົດ ແລະ ລາຍງານການສະຫລຸບປະຈຳອາທິດທາງໂທລະສັບ, ໃຫ້ຂຽນຈົດໝາຍຫາປະທານເຜີຍແຜ່ຂອງທ່ານດັ່ງທີ່ເຄີຍເຮັດທຸກອາທິດ ແລະ ໃຫ້ຕັດສິນໃຈກ່ຽວກັບເປົ້າໝາຍຂອງທ່ານສຳລັບອາທິດທີ່ຈະມາເຖິງ.

ກ່ອນທ່ານຈະອອກຈາກຫ້ອງພັກຂອງທ່ານມື້ຕໍ່ໄປ, ໃຫ້ທົບທວນເປົ້າໝາຍ, ແຜນການ, ແລະ ຕາຕະລາງຂອງທ່ານເສຍກ່ອນ. ໃຫ້ປ່ຽນແປງອັນໃດທີ່ຈຳເປັນ. ຕ້ອງອະທິຖານສະເໝີກ່ອນຈະອອກຈາກຫ້ອງພັກຂອງທ່ານ. ທ່ານຈະຮູ້ວ່າແຜນການປະຈຳວັນຂອງທ່ານມີຜົນດີຫລາຍຂະໜາດໃດ ເມື່ອທ່ານບໍ່ຕ້ອງຖາມກັນວ່າ, "ເຮົາຄວນເຮັດຫຍັງຕອນນີ້?"

## ການຮູ້ຈັກຮັບຜິດຊອບ

ຫລັກທຳແຫ່ງການຮູ້ຈັກຮັບຜິດຊອບແມ່ນສຳຄັນໃນແຜນນິລັນດອນຂອງພະເຈົ້າ. ເຮົາທຸກຄົນຈະໄດ້ຢືນຢູ່ຕໍ່ພະພັກຂອງພະຜູ້ເປັນເຈົ້າໃນການຕັດສິນຄັ້ງສຸດທ້າຍ ແລະ ລາຍງານເຖິງສິ່ງທີ່ເຮົາໄດ້ເຮັດໄປກັບໂອກາດທີ່ພະອົງໄດ້ມອບໃຫ້ເຮົາ (ເບິ່ງ ແອລະມາ 5:15–19; D&C 137:9). ມີຫລາຍສິ່ງຫລາຍຢ່າງທີ່ທ່ານສາມາດຮຽນຮູ້ໄດ້ເຖິງການຮູ້ຈັກຮັບຜິດຊອບໃນເວລາທ່ານເຜີຍແຜ່ສາດສະໜາ ທີ່ຈະເປັນຜົນດີຕໍ່ທ່ານຕະຫລອດຊີວິດຂອງທ່ານ. ຫລັກທຳແຫ່ງການຮູ້ຈັກຮັບຜິດຊອບຈະໃຫ້ພອນທ່ານ ຖ້າຫາກທ່ານ:

> *"ເມື່ອການປະຕິບັດຖືກວັດແທກ, ການປະຕິບັດຈະພັດທະນາຂຶ້ນ, ເມື່ອການປະຕິບັດຖືກວັດແທກ ແລະ ລາຍງານ, ລະດັບຂອງການພັດທະນາຈະໄວຂຶ້ນ."*
>
> – ປະທານ ທອມມັສ ແອັສ ມອນສັນ
>
> "THOU ART A TEACHER COME FROM GOD," *IMPROVEMENT ERA*, DEC. 1970, 101

ໝາຍເຫດ

- ເຂົ້າຫາການຈັດເປົ້າໝາຍ ແລະ ການວາງແຜນຂອງທ່ານດ້ວຍແນວຄິດທີ່ວ່າ ທ່ານຈະຮັບຜິດຊອບຕໍ່ຜູ້ນຳເຜີຍແຜ່ຂອງທ່ານ ແລະ ຕໍ່ພະຜູ້ເປັນເຈົ້າຜ່ານທາງການອະທິຖານສຳລັບວຽກງານຂອງທ່ານ.
- ຮູ້ສຶກເຖິງຄວາມຮັບຜິດຊອບສ່ວນຕົວສຳລັບການໄວ້ວາງໃຈຢ່າງສັກສິດທີ່ພະຜູ້ເປັນເຈົ້າໄດ້ມອບໃຫ້ທ່ານ.
- ຈັດຕັ້ງເປົ້າໝາຍທີ່ມີຄວາມໝາຍ.
- ເລືອກທີ່ຈະຈັດການເອງໃນການອະທິບາຍວຽກງານຂອງທ່ານຕໍ່ພະຜູ້ເປັນເຈົ້າ ແລະ ຕໍ່ຜູ້ນຳເຜີຍແຜ່ຂອງທ່ານ. ບໍ່ຕ້ອງຖ້າໃຫ້ຖືກຮຽກຮ້ອງ. ບໍ່ຕ້ອງຂໍໃຫ້ຜູ້ອື່ນຕິດຕໍ່ຫາທ່ານເລື້ອຍໆກ່ຽວກັບສິ່ງທີ່ທ່ານຄວນເປັນຜູ້ຕິດຕໍ່ລາຍງານເອງ. ໃຫ້ມີຄວາມປາດຖະໜາທີ່ຈະຮັບຜິດຊອບຕໍ່ໜ້າທີ່ຂອງທ່ານ.
- ໃຫ້ຍອມຮັບຜິດຊອບຢ່າງເຕັມສ່ວນສຳລັບວຽກງານຂອງທ່ານ. ບໍ່ຕ້ອງໂທດຜູ້ອື່ນສຳລັບສະພາບທີ່ຫຍຸ້ງຍາກ ຫລື ການບໍ່ມີຄວາມກ້າວໜ້າ.
- ໃຫ້ສະແຫວງຫາເພື່ອຈະຮຽນຮູ້ຈາກຜູ້ນຳຂອງທ່ານ, ແລະ ເຊື້ອເຊີນໃຫ້ເຂົາເຈົ້າແນະນຳວິທີທີ່ທ່ານຈະສາມາດພັດທະນາໃຫ້ດີຂຶ້ນໄດ້.
- ໃຫ້ຕັ້ງໃຈເຮັດວຽກງານຂອງທ່ານໃຫ້ດີທີ່ສຸດ.

ການຮູ້ຈັກຮັບຜິດຊອບບໍ່ໄດ້ມາເຖິງແຕ່ໃນຕອນຈົບການເຜີຍແຜ່ຂອງທ່ານເທົ່ານັ້ນ. ມັນເປັນຫລັກທຳທີ່ມີອິດທິພົນຕໍ່ວິທີທີ່ທ່ານເລີ່ມຕົ້ນ, ວິທີທີ່ທ່ານນຶກຄິດ ແລະ ຮູ້ສຶກກ່ຽວກັບຄວາມຮັບຜິດຊອບທີ່ພະຜູ້ເປັນເຈົ້າໄດ້ມອບໃຫ້ທ່ານ, ວິທີທີ່ທ່ານເຂົ້າຫາວຽກງານຂອງທ່ານ, ແລະ ວິທີທີ່ທ່ານອົດທົນໄດ້ດີປານໃດ. ທ່າທີຂອງທ່ານທີ່ມີຕໍ່ປະສົບການໃນການເຜີຍແຜ່ຂອງທ່ານ ຈະເປັນພາບສະທ້ອນເຖິງຄວາມຮັກຂອງທ່ານຕໍ່ພະບິດາເທິງສະຫວັນຂອງທ່ານ ແລະ ຕໍ່ພະບຸດຂອງພະອົງ ແລະ ຄວາມນັບຖືຂອງທ່ານຕໍ່ຖານະປະໂລຫິດ.

ເມື່ອທ່ານອະທິຖານເປັນສ່ວນຕົວ ແລະ ກັບຄູ່ສອນສາດສະໜາຂອງທ່ານ, ໃຫ້ສະແຫວງຫາຄວາມດົນໃຈໃນສິ່ງທີ່ທ່ານຄວນເຮັດແຕ່ລະມື້. ເມື່ອທ່ານເຮັດຕາມແຜນຂອງທ່ານ, ໃຫ້ອະທິຖານ ແລະ ທູນຂໍການຊີ້ນຳຈາກພະຜູ້ເປັນເຈົ້າ. ໃຫ້ມີການອະທິຖານຢູ່ໃນໃຈຂອງທ່ານຕະຫລອດມື້ ເພື່ອວ່າພະວິນຍານຈະໄດ້ຊ່ອຍໃຫ້ທ່ານຮູ້ວ່າຈະໄປໃສ, ຈະເຮັດຫຍັງ, ແລະ ຈະເວົ້າຫຍັງ. ໃຫ້ຖາມຕົນເອງວ່າ, "ເຮົາຈະເຮັດຫຍັງອີກຕື່ມ?" ໃນຄຳອະທິຖານຂອງທ່ານໃນທ້າຍວັນ, ໃຫ້ລາຍງານເຖິງວຽກງານຂອງທ່ານ.

ທ່ານຈະອະທິບາຍຕໍ່ຜູ້ນຳເຜີຍແຜ່ຂອງທ່ານແຕ່ລະອາທິດດ້ວຍການໃຊ້ການສະຫລຸບລາຍງານ ທາງໂທລະສັບ. ຖ້າຫາກທ່ານເປັນຜູ້ນຳເຜີຍແຜ່, ທ່ານຈະໄດ້ຮັບຂໍ້ມູນນີ້ຈາກຜູ້ສອນສາດສະໜາຄົນອື່ນ. ໃຫ້ສະແດງຄວາມສົນໃຈຕໍ່ຊີວິດຂອງເຂົາ ແລະ ຊີວິດຂອງຄົນທີ່ເຂົາສອນແທນທີ່ຈະສົນແຕ່ນຳໂຕເລກເທົ່ານັ້ນ. ຢ່າຕ້ອງໃຊ້ການລາຍ ງານ ຫລື ຂໍ້ມູນທີ່ທ່ານໄດ້ຮັບນັ້ນ ເປັນວິທີບັງຄັບ ຫລື ຄວບຄຸມ. ຂໍ້ມູນທີ່ທ່ານໄດ້ຮັບ ຜ່ານທາງການລາຍງານເຫລົ່ານີ້ ຈະໃຫ້ທ່ານມີໂອກາດຍ້ອງຍໍຜູ້ສອນສາດສະໜາສຳລັບການອຸທິດຕົນຂອງເຂົາ ແລະ ໃຫ້ໂອກາດສຳລັບການອົບລົມໃນອະນາຄົດ.

## ການສຶກສາພະຄຳພີ

**ການຮູ້ຈັກຮັບຜິດຊອບມີຄວາມໝາຍວ່າແນວໃດ?**

D&C 58:26–33 D&C 101:78 ເອເຊກຽນ 33:1–6

**ເປັນຫຍັງອິດສະລະພາບຈຶ່ງສຳຄັນໃນການຮູ້ຈັກຮັບຜິດຊອບ?**

2 ນີໄຟ 2:26–29 ໂຣມ 14:30–31

**ຜູ້ສອນສາດສະໜາ ແລະ ຜູ້ນຳການເຜີຍແຜ່ຈະເຮັດວຽກງານຮ່ວມກັນໄດ້ໃນວິທີໃດ?**

D&C 38:23–25 ເຮັບເຣີ 13:17–18

## ໃຫ້ຈື່ຈຳສິ່ງນີ້

- ໃຫ້ແນວຽກງານຂອງທ່ານໃສ່ກັບຈຸດປະສົງຂອງທ່ານ.
- ໃຫ້ຈັດຕັ້ງເປົ້າໝາຍຕາມຈຸດຊີ້ບອກ.
- ໃຫ້ອະທິຖານຢ່າງຕັ້ງໃຈກ່ຽວກັບເປົ້າໝາຍ ແລະ ແຜນຂອງທ່ານ.
- ໃຫ້ໃຊ້ປຶ້ມບັນທຶກປະຈຳເຂດ ແລະ ປະຕິທິນປະຈຳວັນຂອງຜູ້ສອນສາດສະໜາ ເພື່ອຊ່ອຍຜູ້ຄົນໃຫ້ພັດທະນາສັດທາ, ກັບໃຈ, ແລະ ຮັບບັບຕິດສະມາ, ຮັບເອົາຂອງປະທານແຫ່ງພະວິນຍານບໍລິສຸດ, ແລະ ອົດທົນຈົນເຖິງທີ່ສຸດ.
- ສຳລັບຈຸດຊີ້ບອກແຕ່ລະຈຸດ, ໃຫ້ຈັດຕັ້ງເປົ້າໝາຍທີ່ຈະເຮັດໃຫ້ທ່ານກ້າວໜ້າ, ໃຊ້ສັດທາ, ແລະ ເຮັດວຽກງານຢ່າງໄດ້ຜົນ.
- ໃຫ້ຈັດການວາງແຜນປະຈຳອາທິດ ແລະ ປະຈຳວັນ ທີ່ຈະເນັ້ນໃສ່ການຊ່ອຍເຫລືອຜູ້ອື່ນໃຫ້ກ້າວໜ້າໃນພະກິດຕິຄຸນ.
- ໃຫ້ຮັບຜິດຊອບຕໍ່ພະຜູ້ເປັນເຈົ້າ ແລະ ຜູ້ນຳເຜີຍແຜ່ສຳລັບວຽກງານຂອງທ່ານ.

ໝາຍເຫດ

ໝາຍເຫດ

# ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

## ການສຶກສາສ່ວນຕົວ

- ໃນປຶ້ມບັນທຶກການສຶກສາ, ໃຫ້ຄຳຖາມປະໂຫຍກໜຶ່ງສຳລັບຄຳຖາມແຕ່ລະຄຳໃນພາກ "ໃຫ້ພິຈາລະນາເລື່ອງນີ້."

- ໃຫ້ໃຊ້ສອງສາມນາທີ ແລະ ຄິດກ່ຽວກັບວັນສຸດທ້າຍຂອງທ່ານໃນສະໜາມເຜີຍແຜ່. ເມື່ອວັນນັ້ນມາເຖິງ:
  - ທ່ານຢາກຈະເວົ້າວ່າທ່ານໄດ້ເຮັດຫຍັງແດ່ໃນຕອນທ່ານເປັນຜູ້ສອນສາດສະໜາ?
  - ທ່ານຢາກຈະກາຍເປັນແບບໃດ?
  - ທ່ານຢາກຈະໃຫ້ຜູ້ອື່ນເຫັນຫຍັງແດ່ທີ່ແຕກຕ່າງໃນຕົວທ່ານ?

  ໃນປຶ້ມບັນທຶກການສຶກສາຂອງທ່ານ, ໃຫ້ຂຽນຄຳຕອບຕໍ່ຄຳຖາມແຕ່ລະຄຳເຫລົ່ານີ້. ໃຫ້ພິຈາລະນາສິ່ງທີ່ທ່ານຕ້ອງເຮັດຫຍັງແດ່ໃນເວລານີ້ ເພື່ອຈະໄດ້ເຂົ້າໃຈເປົ້າໝາຍເຫລົ່ານີ້. ໃຫ້ຂຽນແຜນການທີ່ທ່ານຄິດອອກ.

## ການສຶກສາກັບຄູ່ສອນສາດສະໜາ

- ໃຫ້ໃຊ້ປຶ້ມບັນທຶກປະຈຳເຂດເພື່ອຕອບຄຳຖາມຢູ່ຂ້າງລຸ່ມນີ້:
  - ບັນທຶກທັງໝົດທັນເວລາປັດຈຸບັນ, ຖືກຕ້ອງ, ແລະ ອ່ານໄດ້ງ່າຍບໍ?
  - ຜູ້ສອນສາດສະໜາທີ່ຫາກໍມາເຂດນີ້ຈະສາມາດທົບທວນປຶ້ມບັນທຶກປະຈຳເຂດ ແລະ ຮູ້ວ່າຜູ້ຄົນຢູ່ໃນສະພາບໃດບໍ ໃນຄວາມກ້າວໜ້າທາງວິນຍານຂອງເຂົາເຈົ້າ ແລະ ມີຫຍັງອີກແດ່ທີ່ຈະເຮັດເພື່ອຊ່ອຍເຂົາເຈົ້າ?
  - ຜູ້ສອນສາດສະໜາທີ່ຫາກໍມາເຂດນີ້ຈະໄດ້ຮັບຜົນດີຈາກຄວາມພະຍາຍາມຂອງທ່ານ ເພື່ອຫາຜູ້ສົນໃຈໃໝ່ບໍ?
  - ໃຫ້ວາດພາບທ່ານເອງກຳລັງສະເໜີປຶ້ມບັນທຶກປະຈຳເຂດຕໍ່ພະຜູ້ເປັນເຈົ້າ ເມື່ອທ່ານອະທິບາຍເຖິງວິທີທີ່ທ່ານໄດ້ເບິ່ງແຍງຜູ້ຄົນໃນເຂດຂອງທ່ານ. ພະຜູ້ເປັນເຈົ້າຈະພໍໃຈນຳວຽກງານຂອງທ່ານບໍ?

- ໃຫ້ສົນທະນາເຖິງຜູ້ສົນໃຈໃໝ່ຂອງທ່ານ. ໃນປະຕິທິນປະຈຳວັນຂອງທ່ານ, ໃຫ້ຊອກຫາໜ້າທີ່ມີຊື່ວ່າ "ກິດຈະກຳທີ່ນຳໄປສູ່ການຮັບບັບຕິສະມາ, ການຢືນຢັນ, ແລະ ການເຂັ້ມແຂງໃນສາດສະໜາຈັກ." ໃຫ້ເລືອກກິດຈະກຳໜຶ່ງ, ແລະ ໃຫ້ຂຽນລາຍການທຸກຢ່າງທີ່ທ່ານຕ້ອງເຮັດ ເພື່ອກິດຈະກຳນີ້ຈະເກີດຂຶ້ນ. ໃຫ້ສົນທະນາວິທີທີ່ທ່ານຈະວາງແຜນວຽກງານເຫລົ່ານີ້ ເພື່ອວ່າກິດຈະກຳຈະໄດ້ເກີດຂຶ້ນໄດ້ໃນໄວໆນັ້ນ ເທົ່າທີ່ຈະໄວໄດ້.

- ໃຫ້ສົນທະນາເລື່ອງປຽບທຽບດັ່ງຕໍ່ໄປນີ້ກັບຄູ່ສອນສາດສະໜາຂອງທ່ານ. ໃຫ້ຊັ່ງຊາເບິ່ງວ່າ "ສາຍເບັດ" ຂອງທ່ານຢູ່ໃນນ້ຳຄົນປານໃດແຕ່ລະມື້.

  "ເຮົາແຕ່ລະຄົນບໍ່ຄວນເປັນຄືກັນກັບຄົນຫາປາທີ່ຄິດວ່າຕົນໄດ້ຕຶກເບັດໝົດມື້ ເມື່ອຕາມຈິງແລ້ວສ່ວນຫລາຍເຂົາໄດ້ໃຊ້ເວລາຂອງເຂົາໃນການເດີນທາງໄປມາຈາກນ້ຳ, ກິນເຂົ້າງາຍ, ແລະ ຈັດເຄື່ອງມືໃຊ້ຕຶກເບັດຂອງເຂົາ. ຜົນສຳເລັດໃນການຕຶກເບັດແມ່ນຂຶ້ນກັບວ່າສາຍເບັດຂອງທ່ານຢູ່ໃນນ້ຳຄົນປານໃດ, ບໍ່ແມ່ນວ່າທ່ານຢູ່ນອກຫ້ອງພັກຂອງທ່ານດົນປານໃດ. ຄົນຫາປາບາງຄົນອອກໄປຕຶກເບັດເຖິງສິບສອງຊົ່ວໂມງ ແລະ ໄດ້ໃຊ້ເວລາຕຶກເບັດສິບຊົ່ວໂມງ.

ໝາຍເຫດ

ແຕ່ຄົນຫາປາບາງຄົນໄດ້ໄປຕຶກເບັດສິບສອງຊົ່ວໂມງ ແຕ່ໃຊ້ເວລາຕຶກເບັດພຽງແຕ່ສອງຊົ່ວໂມງເທົ່ານັ້ນ. ຜູ້ຕຶກເບັດຄົນທີສອງອາດຈະຄິດວ່າ ເປັນຫຍັງເຂົາຈຶ່ງບໍ່ໄດ້ຮັບຜົນຄືກັນກັບຜູ້ອື່ນ.

"ຫລັກທຳອັນດຽວນີ້ກໍກ່ຽວຂ້ອງກັບຜູ້ສອນສາດສະໜາຄືກັນ, ຜູ້ທີ່ພະອາຈານໄດ້ເອີ້ນວ່າ 'ຜູ້ຫາຄົນ.' ສາຍເບັດຂອງຜູ້ສອນສາດສະໜາຄວນປ່ອນລົງນ້ຳທັນທີທີ່ເຂົາອອກໄປຈາກຫ້ອງພັກຂອງເຂົາ" (Dallin H. Oaks, seminar for new mission presidents, June 20, 2000).

## ການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດ

- ໃຫ້ອ່ານສະພາບການໜຶ່ງດັ່ງຕໍ່ໄປນີ້ໃຫ້ຜູ້ສອນສາດສະໜາຟັງ. ໃນກຸ່ມນ້ອຍ, ໃຫ້ຜູ້ສອນສາດສະໜາສົນທະນາເຖິງເປົ້າໝາຍ ແລະ ແຜນການທີ່ຈະຊ່ອຍຜູ້ຄົນໃນຕົວຢ່າງເຫລົ່ານີ້ໃຫ້ກ້າວໜ້າໄປສູ່ການຮັບບັບຕິດສະມາ ແລະ ການຢືນຢັນ. ໃຫ້ແຕ່ລະກຸ່ມແບ່ງປັນຄວາມຄິດເຫັນຂອງເຂົາເຈົ້າ.

  *ສະພາບການທີໜຶ່ງ:* ທ່ານໄດ້ພົບທ້າວແສງຄຳ ແລະ ນາງວັນດີ ຕອນເຂົາໄດ້ໄປສະໝັກຊ່ອຍຢູ່ບ່ອນເຮັດກິນໃຫ້ຄົນອະນາຖາ. ທ່ານໄດ້ສອນເຂົາເຈົ້າບົດຮຽນໜຶ່ງ, ແລະ ດຽວນີ້ເຂົາຢາກຮູ້ຫລາຍກວ່ານັ້ນ. ເຂົາເຈົ້າບໍ່ຮູ້ສະມາຊິກຂອງສາດສະໜາຈັກ ຈັກຄົນ. ນາງວັນດີເປັນຄົນຄິດສະຕຽນ, ແຕ່ທ້າວແສງຄຳບໍ່ຖືສາດສະໜາໃດ. ເຂົາເຈົ້າບໍ່ໄດ້ແຕ່ງງານກັນ ແຕ່ເຂົາເຈົ້າຢູ່ນຳກັນ. ທ້າວແສງຄຳເຮັດວຽກຈາກ 4 ໂມງແລງ ຫາ 12 ໂມງກາງຄືນ. ນາງວັນດີເຮັດວຽກໃນຕອນກາງເວັນ.

  *ສະພາບການທີສອງ:* ທ້າວສົມພອນໄດ້ຮຽນບົດຮຽນທຸກບົດແລ້ວ ແລະ ໄດ້ໄປໂບດຢ່າງໜ້ອຍສອງເທື່ອຕໍ່ເດືອນ. ລາວເຊື່ອວ່າ ໂຢເຊັບ ສະມິດ ເປັນສາດສະດາ ແລະ ວ່າພະຄຳພີມໍມອນເປັນຄວາມຈິງ. ສະມາຊິກໃນຄອບຄົວຂອງລາວເປັນຄົນກາໂຕລິກທີ່ເຄັ່ງຄັດ ແລະ ບໍ່ເຫັນດີກັບການທີ່ລາວພົບກັບຜູ້ສອນສາດສະໜາ.

  *ສະພາບການທີສາມ:* ນາງຈັນທະວີເປັນນັກຮຽນຢູ່ວິທະຍາໄລ. ລາວມີໝູ່ຄົນໜຶ່ງທີ່ເປັນສະມາຊິກຂອງສາດສະໜາຈັກ. ໝູ່ທີ່ເປັນສະມາຊິກຂອງລາວ ໄດ້ເຊີນໃຫ້ລາວມາພົບກັບພວກທ່ານ. ພວກທ່ານໄດ້ສອນລາວແລ້ວສອງບົດຮຽນ. ໝູ່ທີ່ເປັນສະມາຊິກຂອງລາວໄດ້ຢູ່ນຳທັງສອງເທື່ອ. ລາວຍັງບໍ່ເຄີຍໄປໂບດເທື່ອ ແລະ ກໍຫຍຸ້ງກັບການຮຽນຂອງລາວຫລາຍຈົນບໍ່ມີເວລາທີ່ຈະອ່ານພະຄຳພີມໍມອນຂອງລາວ.

- ເຊື້ອເຊີນໃຫ້ຜູ້ສອນສາດສະໜາແບ່ງປັນປະສົບການທີ່, ຜ່ານການຈັດຕັ້ງເປົ້າໝາຍ ແລະ ວາງແຜນການ, ເຂົາໄດ້ສາມາດຊ່ອຍຜູ້ຄົນໃຫ້:

  - ພັດທະນາສັດທາໃນພະຜູ້ຊ່ອຍໃຫ້ລອດຫລາຍຂຶ້ນ.
  - ກັບໃຈ ແລະ ປ່ຽນແປງໃນທາງທີ່ໄດ້ນຳພາເຂົາເຈົ້າໃຫ້ເຂົ້າໃກ້ຊິດພະເຈົ້າຫລາຍຂຶ້ນ.
  - ຮັບເອົາພັນທະສັນຍາແຫ່ງການບັບຕິດສະມາ ແລະ ການຢືນຢັນ.
  - ກັບຄືນມາໂບດ ແລະ ຕໍ່ພັນທະສັນຍາແຫ່ງການຮັບບັບຕິດສະມາ.

- ໃຫ້ແຍກຜູ້ສອນສາດສະໜາອອກເປັນສາມກຸ່ມ. ອະທິບາຍວ່າ ແຕ່ລະກຸ່ມຈະໄດ້ຮັບການມອບໝາຍທີ່ສຳຄັນ. ແລ້ວມອບວຽກໃດໜຶ່ງດັ່ງຕໍ່ໄປນີ້ໃຫ້ແຕ່ລະກຸ່ມ:

ໝາຍເຫດ

- ເປີດເຂດເຜີຍແຜ່ໃໝ່.
- ຕຽມກອງປະຊຸມເຂດເພື່ອອົບລົມເລື່ອງການແນະນຳພະຄຳພີມໍມອນຕໍ່ຜູ້ສົນໃຈ.
- ຮັບເອົາຄອບຄົວຜູ້ສົນໃຈເຂົ້າມາຮ່ວມໃນຫວອດ. ຄອບຄົວນັ້ນມີລູກສາມຄົນ: ລູກສາວອາຍຸ 8 ປີ, ລູກສາວອີກຜູ້ໜຶ່ງອາຍຸ 12 ປີ, ແລະ ລູກຊາຍອາຍຸ 16 ປີ.

ບອກຜູ້ສອນສາດສະໜາວ່າ ເຂົາເຈົ້າມີເວລາແປດນາທີທີ່ຈະຈັດແຜນການ. ຜູ້ສອນສາດສະໜາຄົນໜຶ່ງຄວນຂຽນແຜນການລົງ, ຮ່ວມດ້ວຍກິດຈະກຳປະຈຳວັນ.

ໃຫ້ແຕ່ລະກຸ່ມສະເໜີແຜນການຂອງເຂົາເຈົ້າ. ຫລັງຈາກການສະເໜີແຕ່ລະສະພາບການ, ໃຫ້ຖາມວ່າ:

- ຜູ້ສອນສາດສະໜາຕ້ອງຮູ້ຫຍັງແດ່ໃນແຕ່ລະສະພາບການ?
- ຜົນສະທ້ອນຈະເປັນແນວໃດ ຖ້າຫາກທ່ານບໍ່ໄດ້ວາງແຜນເຮັດກິດຈະກຳທີ່ມີຜົນປະໂຫຍດໄວ້ລ່ວງໜ້າ ຫລື ບໍ່ໄດ້ວາງແຜນອັນໃດເລີຍ?

ຫລັງຈາກການສະເໜີສະພາບການທັງໝົດ, ໃຫ້ຖາມວ່າ:

- ການວາງແຜນ ແລະ ການຈັດຕັ້ງເປົ້າໝາຍເປັນການສະແດງເຖິງຄວາມຮັກແນວໃດ? ເປັນການສະແດງເຖິງສັດທາແນວໃດ?

## ປະທານເຜີຍແຜ່

- ຂໍໃຫ້ຜູ້ສອນສາດສະໜາເອົາປຶ້ມບັນທຶກປະຈຳເຂດຂອງເຂົາເຈົ້າມານຳ ຕອນເຂົາເຈົ້າມາຮ່ວມກອງປະຊຸມເຂດ ຫລື ມາຮັບການສຳພາດ. ນອກເໜືອໄປຈາກການທົບທວນປຶ້ມບັນທຶກປະຈຳເຂດດ້ວຍຕົວທ່ານເອງແລ້ວ, ໃຫ້ຜູ້ນຳເຜີຍແຜ່ ຫລື ໃຫ້ພັນລະຍາຂອງທ່ານທົບທວນປຶ້ມບັນທຶກປະຈຳເຂດນັ້ນນຳ.
- ບາງຄັ້ງບາງຄາວ ໃຫ້ສັງເກດເບິ່ງການວາງແຜນປະຈຳອາທິດ ຫລື ປະຈຳວັນຂອງຜູ້ສອນສາດສະໜາ.
- ບາງຄັ້ງບາງຄາວ ໃຫ້ໄປສຳພາດຜູ້ສອນສາດສະໜາທີ່ຫ້ອງພັກຂອງເຂົາເຈົ້າ. ໃນເວລາທີ່ທ່ານສຳພາດ, ໃຫ້ພັນລະຍາ ຫລື ຜູ້ລອງປະທານ ທົບທວນປຶ້ມບັນທຶກປະຈຳເຂດ ແລະ ປະຕິທິນປະຈຳວັນ.
- ໃຫ້ທົບທວນປະຕິທິນປະຈຳວັນຂອງຜູ້ສອນສາດສະໜາເລື້ອຍໆ.
- ບາງຄັ້ງບາງຄາວ ໃຫ້ໄປຮ່ວມການປະຊຸມສະພາຫວອດ.



# ເຮົາຈະຊອກຫາຄົນເພື່ອສອນໄດ້ແນວໃດ?

ໝາຍເຫດ

## ໃຫ້ພິຈາລະນາເລື່ອງນີ້

- ການຊອກຫາຄົນທີ່ຈະຍອມຮັບທ່ານ ມີຄວາມໝາຍວ່າແນວແໃດ (see D&C 42:8)?
- ເຮົາຈະເພີ່ມສັດທາຂອງເຮົາໃນການຊອກຫາຄົນເພື່ອສອນໄດ້ແນວໃດ?
- ເປັນຫຍັງເຮົາຈຶ່ງຄວນໃຫ້ສະມາຊິກກ່ຽວຂ້ອງໃນຄວາມພະຍາຍາມຂອງເຮົາ ທີ່ຈະຊອກຫາຄົນເພື່ອສອນ?
- ບົດບາດຂອງການສື່ສານ ແລະ ການແນະນຳຜູ້ຄົນຈາກສູນກາງຂອງສາດສະໜາຈັກຄືອັນໃດ?
- ການສຳພັນລະຫວ່າງການຊອກຫາ ແລະ ການສອນຄືອັນໃດ?
- ບົດບາດຂອງການຮັບໃຊ້ໃນການຊອກຫາຄົນເພື່ອສອນຄືອັນໃດ?
- ແນວຄິດບາງຢ່າງສຳລັບການຊອກຫາຄົນເພື່ອສອນທີ່ເຮົາຍັງບໍ່ໄດ້ລອງເທື່ອຄືອັນໃດ?

## ການພັດທະນາສັດທາເພື່ອຊອກຫາ

ຄຳສອນ ແລະ ຫລັກທຳໃນພາກນີ້ຈະເຮັດໃຫ້ສັດທາຂອງທ່ານເຂັ້ມແຂງຂຶ້ນ ທີ່ວ່າພະຜູ້ເປັນເຈົ້າກຳລັງຕຽມຜູ້ຄົນໃຫ້ຕ້ອນຮັບທ່ານ ແລະ ພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່ ພະອົງຈະນຳພາທ່ານໄປຫາເຂົາເຈົ້າ ຫລື ນຳເຂົາເຈົ້າມາຫາທ່ານ. ການຊອກຫາຄົນເພື່ອສອນຈະແຕກຕ່າງກັນໃນເຂດຕ່າງໆໃນໂລກ. ຜູ້ສອນສາດສະໜາ ແລະ ປະທານເຜີຍແຜ່ຕ້ອງປັບຕົວໃຫ້ເຂົ້າກັບສະພາບການ ເຖິງແມ່ນວ່າຈະມີຄວາມແຕກຕ່າງກັນ, ແຕ່ເຖິງຢ່າງໃດກໍຕາມ, ຫລັກທຳສຳລັບການຊອກຫາຄົນ ແມ່ນຄືກັນໝົດທຸກບ່ອນ.

**ຄອບຄົວຂອງພະເຈົ້າ.** ທຸກຄົນຢູ່ໃນໂລກນີ້ໄດ້ເປັນສະມາຊິກໃນຄອບຄົວຂອງພະເຈົ້າ ໃນຊີວິດກ່ອນເກີດ. ເຮົາເປັນພາກສ່ວນໃນຄອບຄົວຂອງພະເຈົ້າໃນໂລກນີ້ ແລະ ຈະສາມາດໄດ້ຮັບພອນທີ່ຍິ່ງໃຫຍ່ຕາມຖານະທີ່ເປັນສະມາຊິກໃນຄອບຄົວຂອງພະອົງໃນຊີວິດທີ່ຈະມາເຖິງ. ເຮົາທຸກຄົນເປັນອ້າຍເອື້ອຍນ້ອງກັນໃນຄອບຄົວຂອງພະເຈົ້າ. ຄວາມຮູ້ນີ້ເຮັດໃຫ້ເຮົາຮູ້ວ່າເຮົາເປັນໃຜ ແລະ ເປັນຂອງຜູ້ໃດ ມັນເຮັດໃຫ້ເຮົາມີເຫດຜົນໃນຄວາມຫວັງທີ່ຈະຊີວິດນິລັນດອນໃນທີ່ປະທັບຂອງພະເຈົ້າ. ເຮົາເຂົ້າໃຈຄວາມຈິງຂັ້ນພື້ນຖານເຫລົ່ານີ້ຍ້ອນການຟື້ນຟູ ການສອນຄວາມຈິງທີ່ໄດ້ຟື້ນຟູຄືນມາໃໝ່ໃຫ້ແກ່ອ້າຍເອື້ອຍນ້ອງຂອງທ່ານ ເປັນຄວາມຮັບຜິດຊອບ ແລະ ພອນຂອງທ່ານ ເໝືອນດັ່ງແອລະມາ ທີ່ໄດ້ສະແຫວງຫາເພື່ອຊ່ອຍຊາວໂຊລຳ

© 1990 Del Parson. ຫ້າມລອກແບບ.

ໝາຍເຫດ

ຜູ້ປະຖິ້ມຄວາມເຊື່ອ, ທ່ານກໍສາມາດອະທິຖານວ່າ: "ໂອ້ ພະຜູ້ເປັນເຈົ້າ, ຂໍພະອົງປະທານໃຫ້ພວກຂ້ານ້ອຍ, ເພື່ອພວກຂ້ານ້ອຍຈະມີຄວາມສຳເລັດໃນການນຳເຂົາມາສູ່ພະອົງໃນພະຄິດອີກ, ຈົ່ງເບິ່ງ ໂອ້ ພະຜູ້ເປັນເຈົ້າ, ຈິດວິນຍານຂອງເຂົາ ມີຄ່າ . . . ສະນັ້ນ ຈົ່ງໂປດປະທານພະລັງ ແລະ ປັນຍາໃຫ້ພວກຂ້ານ້ອຍ, ໂອ້ ພະຜູ້ເປັນເຈົ້າ, ເພື່ອພວກຂ້ານ້ອຍຈະນຳຄົນເຫລົ່ານີ້, ພີ່ນ້ອງຂອງພວກຂ້ານ້ອຍມາສູ່ພະອົງອີກ" (see Alma 31:34–35).

**"ຊອກຫາຜູ້ທີ່ຈະຮັບເຈົ້າ."** ທ່ານຈະເສີມສ້າງສາດສະໜາຈັກດ້ວຍການຊອກຫາຜູ້ທີ່ຈະຮັບເຈົ້າ (see D&C 42:8). ຜູ້ຄົນເຫລົ່ານີ້ຈະຮັບຮູ້ວ່າ ທ່ານເປັນຜູ້ຮັບໃຊ້ຂອງພະຜູ້ເປັນເຈົ້າ. ເຂົາຈະເຕັມໃຈປະຕິບັດຕາມຂ່າວສານຂອງທ່ານ. ຫລາຍຄົນເຫລົ່ານີ້ໄດ້ຖືກກັນໄວ້ຈາກຄວາມຈິງ ເພາະເຂົາບໍ່ຮູ້ວ່າຈະຫາມັນຢູ່ໃສ (see D&C 123:12).

ຕາມທຳມະດາແລ້ວ ທ່ານບໍ່ຮູ້ວ່າຜູ້ຄົນເຫລົ່ານີ້ເປັນໃຜ. ເຂົາອາດຈະບໍ່ຮັບຮູ້ທ່ານໃນທັນທີວ່າ ທ່ານເປັນຜູ້ຮັບໃຊ້ຂອງພະຜູ້ເປັນເຈົ້າ. ເຂົາອາດຈະບໍ່ເຂົ້າໃຈວ່າ ຄວາມສະຫງົບສຸກອັນຍິ່ງໃຫຍ່, ການຊີ້ນຳ, ແລະ ຈຸດປະສົງໃນຊີວິດຈະມາຫາຜ່ານທາງພະກິດຕິຄຸນ ທີ່ໄດ້ຟື້ນຟູຄືນມາໃໝ່ ກວ່າສິ່ງໃດທັງໝົດ. ເຂົາບໍ່ຮູ້ວ່າເຂົາກຳລັງຊອກຫາພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່ ຈົນວ່າເຂົາພົບມັນ. ຕົວຢ່າງຄື, ຜູ້ປ່ຽນໃຈເຫລື້ອມໃສຄົນໜຶ່ງໄດ້ເວົ້າວ່າ, "ເມື່ອຂ້າພະເຈົ້າໄດ້ຍິນພະກິດຕິຄຸນ, ມັນໄດ້ສະໜອງຄວາມປາດຖະໜາໃນໃຈຂອງຂ້າພະເຈົ້າ ເຊິ່ງຂ້າພະເຈົ້າບໍ່ຮູ້ຕົວວ່າ ຕົວເອງຕ້ອງການ." ຄົນໜຶ່ງອີກເວົ້າວ່າ, "ຂ້າພະເຈົ້າໄດ້ຊອກພົບແລ້ວ ເຊິ່ງຂ້າພະເຈົ້າບໍ່ຮູ້ຕົວວ່າ ຕົວເອງໄດ້ຊອກຫາ."

ບ່ອນໃດກໍຕາມທີ່ທ່ານຖືກມອບໝາຍໃຫ້ໄປຮັບໃຊ້, ຈົ່ງຈຳໄວ້ວ່າພະຜູ້ເປັນເຈົ້າໄດ້ຍອມໃຫ້ທ່ານມາບ່ອນນີ້, ເພາະມັນເປັນການສົມຄວນໃນພະອົງເພື່ອຄວາມລອດຂອງຈິດວິນຍານ." ຈົ່ງເຮັດວຽກງານໃຫ້ມີຜົນດີເພື່ອ "ຈະເປັ່ງສຽງຂອງທ່ານຕໍ່ຄົນພວກນີ້; ຈົ່ງເວົ້າຄຳທີ່ພະຜູ້ເປັນເຈົ້າຈະໃສ່ໄວ້ໃນໃຈຂອງທ່ານ. ຖ້າຫາກທ່ານເຮັດແບບນີ້, ທ່ານຈະໄດ້ຮັບຄຳສັນຍາວ່າ ທ່ານຈະບໍ່ຈຳນົນຄົນ, ແລະ ສິ່ງທີ່ທ່ານຈະເວົ້າ ຈະຖືກມອບໃຫ້ທ່ານ . . . ໃນນາທີນັ້ນ, (see D&C 100:4–6) ການຊອກຫາດ້ວຍພະວິນຍານກໍສຳຄັນເທົ່າໆກັບການສອນດ້ວຍພະວິນຍານ ຄືກັນກັບການສອນ, ຄວາມພະຍາຍາມໃນການຊອກຫາຄົນຈະມີຜົນດີ ຖ້າຫາກທ່ານຖືກນຳພາດ້ວຍພະວິນຍານ. ໃຫ້ມີສັດທາວ່າ ທ່ານຈະຮູ້ສິ່ງທີ່ຈະສອນ ແລະ ສິ່ງທີ່ຈະເຮັດເພື່ອຊອກຫາຜູ້ທີ່ຈະຮັບທ່ານ.

### ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ

ສະມາຊິກຫລາຍຄົນທີ່ທ່ານໄປຢ້ຽມຢາມອາດເປັນຜູ້ປ່ຽນໃຈເຫລື້ອມໃສເຂົ້າໃນສາດສະໜາຈັກ. ໃຫ້ຫາເວລາຖາມເຂົາເຈົ້າວ່າ ເຂົາເຈົ້າມາຮູ້ຈັກກັບສາດສະໜາຈັກໄດ້ແນວໃດ ແລະ ຮັບຮູ້ວ່າ ຜູ້ສອນສາດສະໜາໄດ້ສອນເຂົາເຈົ້າເຖິງຄວາມຈິງແນວໃດ. ໃຫ້ສະຫລຸບປະສົບການຂອງເຂົາເຈົ້າໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

### ການສຶກສາພະຄຳພີ

**ລູກໆຂອງພະເຈົ້າຖືກຕຽມໄວ້ ແລະ ຖືກນຳພາໄປຫາພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່ໃນວິທີໃດ?**

| | | |
|---|---|---|
| Alma 13:24 | D&C 29:7 | D&C 84:45–47, 88 |
| Alma 16:16–17 | D&C 33:6 | D&C 136:32–33 |

## ເວົ້າກັບທຸກຄົນ

ຂະນະທີ່ສາດສະດາ ໂຢເຊັບ ສະມິດ ກຳລັງເດີນທາງໄປທາງນ້ຳກັບກຸ່ມຜູ້ສອນສາດສະໜາຕາມແມ່ນ້ຳ ມີເຊີລີ, ພະຜູ້ເປັນເຈົ້າໄດ້ເປີດເຜີຍວ່າ, ມັນບໍ່ຈຳເປັນ . . . ທີ່ແອວເດີຂອງພະອົງຈະເຄື່ອນໄປຢ່າງໄວ . . . ຂະນະທີ່ຜູ້ອາໄສຢູ່ທັງສອງຝັ່ງກຳລັງຕາຍໃນຄວາມບໍ່ເຊື່ອ (see D&C 61:3). ເມື່ອທ່ານເຄື່ອນໄປຢ່າງໄວ ເພື່ອເຮັດກິດຈະກຳຕາມທີ່ໄດ້ຈັດໄວ້, ໃຫ້ອະທິຖານເພື່ອຄວາມສາມາດທີ່ຈະເຫັນໂອກາດທີ່ບໍ່ໄດ້ຈັດໄວ້ກ່ອນ ເພື່ອຮັບໃຊ້ ແລະ ສອນຜູ້ທີ່ "ກຳລັງຕາຍດ້ວຍຄວາມບໍ່ເຊື່ອ." ໃຫ້ອະທິຖານເພື່ອຄວາມຮູ້ສຶກທາງວິນຍານ



ໝາຍເຫດ

ເພື່ອຈະໄດ້ຮູ້ເມື່ອໂອກາດມາເຖິງ. ທ່ານຈະພົບວ່າ ພະເຈົ້າໄດ້ວາງລູກໆຂອງພະອົງໄວ້ຕາມທາງຂອງທ່ານ ຜູ້ທີ່ຕຽມພ້ອມແລ້ວທີ່ຈະຮັບເອົາພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່.

ຈະບໍ່ມີຫຍັງເກີດຂຶ້ນໃນວຽກງານເຜີຍແຜ່ຈົນກວ່າທ່ານພົບຄົນທີ່ຈະສອນ. ໃຫ້ເວົ້າກັບຫລາຍໆຄົນເທົ່າທີ່ທ່ານສາມາດເຮັດໄດ້ແຕ່ລະມື້. ມັນເປັນຂອງທຳມະດາທີ່ຈະຢ້ານເວົ້າກັບຜູ້ຄົນ, ແຕ່ທ່ານສາມາດອະທິຖານເພື່ອສັດທາ ແລະ ພະລັງເພື່ອຈະກ້າຫານໃນການອ້າປາກຂອງທ່ານ ປະກາດພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່ ໃຫ້ນຳໃຊ້ຄວາມຄິດດັ່ງຕໍ່ໄປນີ້ເມື່ອທ່ານຫາໂອກາດທີ່ຈະເວົ້ານຳທຸກຄົນທີ່ທ່ານພົບເຫັນ:

- ເວົ້ານຳຜູ້ຄົນກ່ຽວກັບຄອບຄົວຂອງເຂົາ. ຊ່ອຍໃຫ້ເຂົາເຫັນວິທີທີ່ພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່ສາມາດເປັນພອນແກ່ຄອບຄົວຂອງເຂົາໄດ້ແນວໃດ.
- ຊອກຫາຮ່ອງຮອຍ—ເຊັ່ນ ສິ່ງຂອງໃນເຮືອນ ຫລື ໃນເດີ່ນບ້ານ, ໂຕໜັງສືໃນເຄື່ອງນຸ່ງ, ຫລື ສິ່ງທີ່ສະແດງບອກວ່າມີເດັກນ້ອຍ—ເພື່ອຊ່ອຍໃຫ້ທ່ານຮູ້ວິທີທີ່ຈະເລີ່ມເວົ້າກັບຜູ້ຄົນ.
- ຟັງສິ່ງທີ່ຜູ້ຄົນເວົ້ານຳທ່ານດ້ວຍຄວາມຈິງໃຈ.
- ຮັກແພງ, ເປັນໝູ່ເພື່ອນ, ແລະ ເບີກບານ. ສະເໜີຄວາມຊ່ອຍເຫລືອ.
- ໄວ້ວາງໃຈພະວິນຍານທີ່ຈະເອົາສິ່ງທີ່ທ່ານຈະສອນ ເຂົ້າໃສ່ໃນຄວາມຄິດ ແລະ ຈິດໃຈຂອງທ່ານ.
- ເຊື້ອເຊີນທຸກຄົນໃຫ້ຮຽນຮູ້ກ່ຽວກັບພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່.
- ເອົາບັດນ້ອຍສຳລັບສິ່ງຕໍ່ໃຫ້ເຂົາເຈົ້າ.
- ຂໍຊື່ຜູ້ຄົນທີ່ເຂົາເຈົ້າຮູ້ຈັກ ຜູ້ທີ່ອາດຈະສົນໃຈຂ່າວສານຂອງທ່ານ.

ເມື່ອທ່ານອ່ານເລື່ອງຈິງຕໍ່ໄປນີ້, ໃຫ້ຊອກຫາວິທີທີ່ຊາຍຄົນນີ້ໄດ້ຖືກຕຽມໄວ້ເພື່ອຮັບຜູ້ສອນສາດສະໜາ ແລະ ວິທີທີ່ຜູ້ສອນສາດສະໜາໄດ້ໃຊ້ໂອກາດທີ່ບໍ່ໄດ້ຈັດໄວ້ກ່ອນ ເພື່ອສອນພະກິດຕິຄຸນໃຫ້ລາວແນວໃດ.

*ຕອນຍັງນ້ອຍ, ຂ້າພະເຈົ້າບໍ່ເຄີຍຖືກສອນໃຫ້ອ່ານພະຄຳພີໄບເບິນ. ຂ້າພະເຈົ້າເຄີຍໄປໂບດໃນວັນອາທິດ, ແຕ່ຂ້າພະເຈົ້າບໍ່ໄດ້ເຮັດຫຍັງ ແລະ ຮູ້ສຶກວ່າ ບໍ່ໄດ້ຮັບຫຍັງ. ຂ້າພະເຈົ້າຜິດຫວັງໃນສາດສະໜາຂອງຕົວເອງ. . . . ຂ້າພະເຈົ້າໄດ້ຊອກຫາ . . . ພະເຈົ້າ— ຢາກຮູ້ວ່າພະອົງມີຈິງຫລືບໍ່. ຂ້າພະເຈົ້າຢາກຮູ້ພະອົງ ແລະ ຄຳຂອງພະອົງ. ແຕ່ເບິ່ງຄືວ່າຂ້າພະເຈົ້າບໍ່ສາມາດພົບສິ່ງທີ່ຂ້າພະເຈົ້າຊອກຫາ.*

*ມີບາງເວລາທີ່ຂ້າພະເຈົ້າຮູ້ສຶກວ່າ ເກືອບຈະລະງັບຄວາມຫິວກະຫາຍໄດ້. ຕອນຂ້າພະເຈົ້າໄດ້ອູ້ມລູກກົກ, ລູກສາວ, ເທື່ອທຳອິດ, ຂ້າພະເຈົ້າຮູ້ສຶກວ່າ ພະເຈົ້າມີຈິງ. ຫລາຍປີຕໍ່ມາ, ເມື່ອນ້ອງສາວຂອງລາວເກີດມາ, ຂ້າພະເຈົ້າໄດ້ປະສົບຄວາມຮູ້ສຶກແບບດຽວກັນນັ້ນ . . . ແຕ່ສ່ວນຫລາຍແລ້ວ ຄວາມອ່ອນເພຍທີ່ອະທິບາຍຍາກໄດ້ເຮັດໃຫ້ຈິດວິນຍານຂອງຂ້າພະເຈົ້າໜັກໃຈ. ຂ້າພະເຈົ້າຫິວກະຫາຍນ້ຳທາງວິນຍານ ແລະ ບໍ່ມີບ່ອນຈະດື່ມນ້ຳໄດ້.*

*ໃນເດືອນ ເມສາ ປີ 1994 ຂ້າພະເຈົ້າໄດ້ອາໄສຢູ່ເມືອງ ມອນທະເລ ປະເທດ ແມັກຊິໂກ, ໄດ້ຂັບລົດແທັກຊີ ເປັນອາຊີບ. ມື້ໜຶ່ງຝົນຕົກຫລາຍຊົ່ວໂມງ, ເຮັດໃຫ້ນ້ຳໄຫລລົງມາຈາກພູ. ຫລັງຈາກຂັບລົດຕາກຝົນໄປມາຫລາຍຊົ່ວໂມງ, ຂ້າພະເຈົ້າໄດ້ໄປຮອດເມືອງນ້ອຍເມືອງໜຶ່ງປະມານ ແປດ ກິໂລແມັດ (ປະມານ ຫ້າ ໄມ) ຈາກເມືອງມອນທະເລ. ມັນໃກ້ຈະເຖິງ . . . ເວລາກັບບ້ານແລ້ວ. ໃນທັນທີທັນໃດນັ້ນ ຂ້າພະເຈົ້າໄດ້ເຫັນຊາຍໜຸ່ມສອງຄົນຍ່າງໄປຕາມທາງ. ເຂົາເຈົ້ານຸ່ງໂສ້ງສີດຳ ແລະ ເສື້ອສີຂາວ, ແລະ ປຽກແຕ່ຫົວເຖິງຕີນ.*

*ເມື່ອຂ້າພະເຈົ້າຂັບໄປໃກ້ເຂົາເຈົ້າ, ຂ້າພະເຈົ້າໄດ້ເປີດປະຕູລົດ ແລະ ເອີ້ນໃສ່ເຂົາເຈົ້າວ່າ, "ເຂົ້າມາແມ! ຂ້ອຍກຳລັງຈະໄປເມືອງ ມອນທະເລ."*

*ຜູ້ທີ່ສູງ, ທີ່ມີຜິວຂາວ, ໄດ້ຕອບວ່າ, "ພວກເຮົາບໍ່ມີເງິນ."*

*"ບໍ່ຄິດຄ່າດອກ," ຂ້າພະເຈົ້າຕອບ.*

*ເຂົາເຈົ້າໄດ້ພາກັນເຂົ້າລົດຢ່າງໄວ.*

*ໃນຂະນະທີ່ຂ້າພະເຈົ້າຂັບໄປ, ພວກເຮົາໄດ້ລົມກັນ. ເຂົາເຈົ້າໄດ້ຖາມວ່າ ເຂົາເຈົ້າຂໍແບ່ງປັນຂ່າວສານກ່ຽວກັບພະເຢຊູຄຣິດກັບຂ້າພະເຈົ້າໄດ້ບໍ. ຂ້າພະເຈົ້າຕົກລົງ ແລະ ໄດ້ເອົາທີ່ຢູ່ຂອງຂ້າພະເຈົ້າໃຫ້ເຂົາເຈົ້າ.*

*ເມື່ອຂ້າພະເຈົ້າໄປຮອດບ້ານ, ຂ້າພະເຈົ້າໄດ້ປຸກເມຍໃຫ້ຕື່ນນອນ ແລະ ໄດ້ເລົ່າເລື່ອງຊາຍໜຸ່ມສອງຄົນໃຫ້ນາງຟັງ. "ມັນເປັນເລື່ອງແປກ," ຂ້າພະເຈົ້າເວົ້າ. "ຜູ້ໜຶ່ງເປັນຄົນແມັກ ແລະ ອີກຜູ້ໜຶ່ງເປັນຄົນອາເມລິກາ, ແຕ່ເຂົາທັງສອງມີຊື່ວ່າ ແອວເດີ."*

*"ແອວເດີໝາຍຄວາມວ່າ ຜູ້ສອນສາດສະໜາ," ເມຍຂອງຂ້າພະເຈົ້າຕອບ, ຕາມຄວາມຮູ້ເລັກນ້ອຍກ່ຽວກັບສາດສະໜາຈັກ.*

ໝາຍເຫດ

*ຈາກສ່ວນເລິກໃນໃຈຂອງຂ້າພະເຈົ້າ, ຂ້າພະເຈົ້າຮູ້ສຶກວ່າ ມີຫຍັງເຮັດໃຫ້ຕື່ນເຕັ້ນ. ຊາຍໜຸ່ມສອງຄົນນີ້ໄດ້ປະຄວາມປະຫລາດໃຈໄວ້ໃນຫົວໃຈຂອງຂ້າພະເຈົ້າ. ຂ້າພະເຈົ້າຮູ້ສຶກວ່າ ຂ້າພະເຈົ້າໃກ້ຈະພົບນ້ຳທີ່ຈະເຮັດໃຫ້ຄວາມຫິວຫາຍໄປ, ວ່າມັນຢູ່ພຽງແຕ່ເອື້ອມມືເທົ່ານັ້ນ.*

*ຜູ້ສອນສາດສະໜາໄດ້ມາບ້ານພວກເຮົາໃນວັນທີ 5 ເດືອນ ມິຖຸນາ, ແລະ ຂ້າພະເຈົ້າກໍດີໃຈທີ່ຈະຟັງເຂົາເຈົ້າ. ສອງອາທິດຕໍ່ມາ, ໃນວັນທີ 19 ເດືອນ ມິຖຸນາ, ຂ້າພະເຈົ້າໄດ້ຮັບບັບຕິດສະມາ. ເມຍຂອງຂ້າພະເຈົ້າໄດ້ຮັບບັບຕິດສະມາສີ່ເດືອນຕໍ່ມາ, ໃນເດືອນ ຕຸລາ. ຕອນນັ້ນລູກສາວກໍໄດ້ຮັບການອົບຮົມທາງສາດສະໜາໃນໂຮງຮຽນ. ເມື່ອນາງໄປໂບດເທື່ອທຳອິດ, ນາງໄດ້ເວົ້າວ່າ, "ພໍ່ເອີຍ, ນີ້ກໍຄືກວ່າສິ່ງທີ່ລູກກຳລັງຮຽນຢູ່ໂຮງຮຽນ!" ນາງກໍໄດ້ຮັບບັບຕິດສະມາໃນເດືອນ ຕຸລາ ຄືກັນ.*

*ໃນເດືອນ ທັນວາ ປີ 1995 ພວກເຮົາໄດ້ຜະນຶກເຂົ້າກັນເປັນຄອບຄົວສຳລັບການເວລາ ແລະ ຊົ່ວນິລັນດອນໃນພະວິຫານ ແມັກຊິໂກ ຊິທີ ປະເທດ ແມັກຊິໂກ. ບັດນີ້ພວກເຮົາເປັນຄອບຄົວທີ່ມີຄວາມປອງດອງ, ຄວາມສະຫງົບ, ແລະ ຄວາມສຸກ. ພວກເຮົາຮູ້ວ່າ ພວກເຮົານະມັດສະການໃຜ. ພວກເຮົາຮູ້ວ່າ ພວກເຮົາມາຈາກໃສ ແລະ ວ່າພວກເຮົາຈະໄປໃສ. ພວກເຮົາຮັກຄຳຂອງພະອົງ, ໂດຍສະເພາະພະຄຳພີມໍມອນ, ແລະ ພວກເຮົາຮັກສາດສະໜາຈັກຂອງພະອົງ, ສາດສະໜາຈັກຂອງພະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍ. ຜ່ານທາງພະພອນເຫລົ່ານີ້ ພວກເຮົາໄດ້ເຫັນນ້ຳສ້າງແຫ່ງຊີວິດ ທີ່ພະຜູ້ຊ່ອຍໃຫ້ລອດໄດ້ກ່າວຕໍ່ຜູ້ຍິງໄທຊາມາເລຍ ວ່າ: "ແຕ່ຜູ້ໃດກໍຕາມທີ່ດື່ມນ້ຳທີ່ເຮົາຈະໃຫ້ນັ້ນ ຈະບໍ່ຢາກອີກຈັກເທື່ອ. ນ້ຳທີ່ເຮົາຈະໃຫ້ນັ້ນ ຈະກາຍເປັນນ້ຳພຸແຫ່ງຊີວິດ ແລະ ຈະໃຫ້ລາວມີຊີວິດອັນຕະຫລອດໄປເປັນນິດ" (ໂຢຮັນ 4:14). [Victor Manuel Cabrera, "Thirsting for the Living Water,"* Ensign, *Aug. 2001, 60–61]*



© 2001 Simon Dewey ຫ້າມລອກແບບ.

## ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ

- ຜູ້ຊາຍຜູ້ນັ້ນໄດ້ຖືກຕຽມໄວ້ວິທີໃດສຳລັບພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່?
- ອັນໃດອາດເກີດຂຶ້ນ ຖ້າຫາກພວກແອວເດີບໍ່ໄດ້ອ້າປາກຂໍແບ່ງປັນຂ່າວສານຂອງພະກິດຕິຄຸນ?
- ທົບທວນສິ່ງທີ່ທ່ານໄດ້ເຮັດມື້ວານນີ້. ທ່ານໄດ້ເວົ້ານຳຫລາຍໆຄົນເທົ່າທີ່ເປັນໄປໄດ້ບໍ? ຖ້າຫາກວ່າບໍ່, ໃຫ້ວາງແຜນ ແລະ ຕັ້ງເປົ້າໝາຍທີ່ຈະເຮັດມື້ນີ້.

## ການສຶກສາພະຄຳພີ

**ພະຜູ້ເປັນເຈົ້າໄດ້ກ່າວຫຍັງແດ່ກ່ຽວກັບການອ້າປາກຂອງທ່ານ? ທ່ານຄວນສອນສິ່ງໃດ? ທ່ານໄດ້ຖືກສັນຍາຫຍັງແດ່?**

| | | |
|---|---|---|
| D&C 24:12 | D&C 33:7–15 | D&C 60:2–3, 7–8 |
| D&C 28:16 | | |

## ໃຫ້ສອນຍາມທ່ານພົບ, ໃຫ້ຊອກຫາຍາມທ່ານສອນ

ການຊອກຫາ ແລະ ການສອນເປັນກິດຈະກຳທີ່ກ່ຽວຂ້ອງ ແລະ ພົວພັນກັນ. ເມື່ອທ່ານພົບຜູ້ຄົນ, ໃຫ້ຕຽມສອນຂໍ້ສະຫລຸບສັ້ນໆເຖິງຄວາມຈິງຂອງການຟື້ນຟູ ເພື່ອພະວິນຍານຈະສາມາດເປັນພະຍານວ່າ ທ່ານເປັນຜູ້ຮັບໃຊ້ຂອງພະຜູ້ເປັນເຈົ້າ. ໃນຫລາຍກໍລະນີ, ທ່ານຈະຕ້ອງຕຽມເພື່ອສະເໜີຂ່າວສານພາຍໃນໜຶ່ງນາທີ ຫລື ໜ້ອຍກວ່ານັ້ນ. ຜູ້ຄົນລຶ້ງເຄີຍກັບການຟັງຄຳຖະແຫລງແບບສັ້ນໆ ແລະ ມີພະລັງ. ຕົວຢ່າງຄື, ທ່ານອາດຈະສະແດງປະຈັກພະຍານຕໍ່ຂ່າວສານຂອງການຟື້ນຟູໃນສອງ ຫລື ສາມປະໂຫຍກເທົ່ານັ້ນດັ່ງນີ້:

ໝາຍເຫດ

*ຫລັງຈາກໄດ້ເສຍໄປເປັນເວລາຫລາຍສັດຕະວັດ, ຄວາມຈິງດັ້ງເດີມຂອງພະເຈົ້າ (ພະກິດຕິຄຸນຂອງພະເຢຊູຄຣິດ) ໄດ້ຖືກຟື້ນຟູຄືນມາໃໝ່ໂດຍພະເຈົ້າທີ່ຊົງຮັກ ຜ່ານທາງສາດສະດາທີ່ມີຊີວິດຢູ່. ພວກເຮົາມີຫລັກຖານນີ້ທີ່ທ່ານສາມາດຈັບບາຍໄດ້ດ້ວຍມືທ່ານເອງ, ອ່ານ ແລະ ໄຕ່ຕອງໃນໃຈຂອງທ່ານ, ແລະ ອະທິຖານເພື່ອຈະໄດ້ຮູ້ຄວາມຈິງກ່ຽວກັບເລື່ອງນີ້ ສຳລັບທ່ານເອງ. ທ່ານຈະອະນຸຍາດໃຫ້ພວກເຮົາ . . .*

ຖ້າຫາກວ່າມີເວລາຕື່ມອີກ, ທ່ານອາດຈະເວົ້າຫລາຍກວ່ານັ້ນ:

*ຂ່າວສານຂອງພວກເຮົາແມ່ນງ່າຍໆ. ພະເຈົ້າເປັນພະບິດາຂອງເຮົາ. ເຮົາເປັນລູກຂອງພະອົງ. ເຮົາເປັນພາກສ່ວນໃນຄອບຄົວຂອງພະອົງ. ພະອົງຮັກເຮົາ. ຕັ້ງແຕ່ການເປັນມາຂອງໂລກ, ພະອົງໄດ້ຕິດຕາມແບບແຜນແຫ່ງຄວາມຮັກ ແລະ ຄວາມຫ່ວງໃຍ. ຫລາຍໆຄັ້ງ ພະອົງໄດ້ຢື້ມືອອກມາດ້ວຍຄວາມຮັກ ເພື່ອເປີດເຜີຍພະກິດຕິຄຸນຂອງພະເຢຊູຄຣິດ ເພື່ອລູກໆຂອງພະອົງຈະສາມາດຮູ້ທາງກັບຄືນໄປຫາພະອົງ. ພະອົງໄດ້ເປີດເຜີຍມັນຕໍ່ສາດສະດາດັ່ງເຊັ່ນ ອາດາມ, ໂນອາ, ອັບລາຮາມ, ແລະ ໂມເຊ. ແຕ່ບາງຄົນຍັງເລືອກປະຕິເສດພະກິດຕິຄຸນນັ້ນຢູ່ເທື່ອແລ້ວເທື່ອອີກ ສອງພັນປີທີ່ຜ່ານມາ, ພະເຢຊູຄຣິດພະອົງເອງໄດ້ສອນພະກິດຕິຄຸນຂອງພະອົງ. ບໍ່ເປັນຕາເຊື່ອ, ແຕ່ຜູ້ຄົນກໍໄດ້ປະຕິເສດພະອົງອີກ. ເມື່ອໃດຜູ້ຄົນບິດເບືອນ ຫລື ບໍ່ເອົາໃຈໃສ່ຄຳສອນ ແລະ ພິທີການ, ພະເຈົ້າຈະຖອນອຳນາດຂອງພະອົງອອກຈາກການປະຕິບັດສາດສະໜາຈັກ.*

*ການເຊື້ອເຊີນຂອງພວກເຮົາຕໍ່ທ່ານແມ່ນເພື່ອເພີ່ມເຕີມໃສ່ຄວາມຈິງທີ່ທ່ານຖືວ່າເປັນສິ່ງມີຄ່າຢູ່ແລ້ວ. ຂໍໃຫ້ທ່ານພິຈາລະນາຫລັກຖານທີ່ພະບິດາເທິງສະຫວັນຂອງເຮົາ ໄດ້ຢື້ມືອອກຫາລູກໆຂອງພະອົງດ້ວຍຄວາມຮັກ ແລະ ໄດ້ເປີດເຜີຍຄຳສອນ ແລະ ພິທີການທີ່ແທ້ຈິງຕໍ່ສາດສະດາ. ສາດສະດາຜູ້ນີ້ຊື່ວ່າ ໂຢເຊັບ ສະມິດ. ຫລັກຖານເຖິງຄວາມຈິງແຫ່ງລັດສະໝີພາບນີ້ ມີຢູ່ໃນປຶ້ມເຫລັ້ມໜຶ່ງຊື່ວ່າ—ພະຄຳພີມໍມອນ. ທ່ານສາມາດຈັບບາຍມັນດ້ວຍມືຂອງທ່ານ, ອ່ານມັນ, ແລະ ໄຕ່ຕອງຄວາມຈິງຂອງມັນ ໃນຄວາມຄິດ ແລະ ຈິດໃຈຂອງທ່ານ.*

ໃຫ້ຫລີກເວັ້ນຈາກຄຳມັກເວົ້າທີ່ວ່າ, "ທ່ານມີເວລາສອງສາມນາທີໃຫ້ພວກເຮົາສອນທ່ານເຖິງຂ່າວສານກ່ຽວກັບ . . ." ແຕ່ໃຫ້ພັດທະນານິໄສທີ່ຈະເລີ່ມສອນ ແລະ ສະແດງປະຈັກພະຍານໃນທັນທີເມື່ອທ່ານພົບຄົນ. ທ່ານຈະພົບຫລາຍຄົນເພື່ອສອນ ເມື່ອທ່ານສະແດງປະຈັກພະຍານ ແລະ ໃຫ້ເຂົາຮູ້ສຶກເຖິງພະລັງຂອງພະວິນຍານບໍລິສຸດ.

ເຖິງວ່າທ່ານຈະເລີ່ມເຂົ້າແບບໃດກໍຕາມ, ໃຫ້ອ້າງເຖິງການຟື້ນຟູຂອງພະກິດຕິຄຸນໄວໆ ແລະ ງ່າຍໆ, ເພາະວ່ານີ້ເປັນຂ່າວສານພິເສດຂອງເຮົາຕໍ່ໂລກ. ຜູ້ຄົນທີ່ທ່ານສອນສ່ວນຫລາຍຈະມີໝູ່ເພື່ອນ ແລະ ພີ່ນ້ອງຜູ້ທີ່ຖືກຕຽມໄວ້ເພື່ອຮັບເອົາພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່ ໃນການສອນທຸກໆສະພາບການ— ດັ່ງເຊັ່ນ ການຊອກຫາຄົນ, ການສອນຜູ້ສົນໃຈ, ການຮ່ວມເຮັດວຽກງານກັບສະມາຊິກ—ໃຫ້ຖາມວ່າ, "ທ່ານຮູ້ໃຜແດ່ທີ່ອາດຈະສົນໃຈ ແລະ ຈະໄດ້ຜົນດີຈາກຂ່າວສານນີ້?" ຫລັງຈາກໄດ້ຊື່ຂອງຜູ້ທີ່ຖືກແນະນຳແລ້ວ, ໃຫ້ຖາມວ່າ, ມີໃຜອີກແດ່ທີ່ຈະໄດ້ຜົນດີຈາກຂ່າວສານຂອງພວກເຮົາ?" ຢ່າລັ່ງເລໃຈທີ່ຈະເວົ້າສິ່ງນີ້ອອກມາອີກເມື່ອພົບກັນເທື່ອຕໍ່ໄປໆ. ເມື່ອຜູ້ທີ່ທ່ານສອນປະສົບພະພອນຂອງພະກິດຕິຄຸນ, ຄວາມປາດຖະໜາຢາກຈະແບ່ງປັນຂອງເຂົາແຮ່ງຈະມີຫລາຍຂຶ້ນ (see 1 Nephi 8:12). ເຂົາຈະມີໝູ່ເພື່ອນໃໝ່ຕື່ມຂຶ້ນເລື້ອຍໆໃນລະຍະທີ່ເຂົາກຳລັງຮຽນພະກິດຕິຄຸນ. ຜູ້ສອນສາດສະໜາທີ່ນຳຫລັກທຳນີ້ມາໃຊ້ ສ່ວນຫລາຍຈະມີຄົນຫລາຍທີ່ຈະສອນ.

### ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ

- ໃຫ້ຕຽມຂ່າວສານເພື່ອສອນໃນນາທີໜຶ່ງອີງຕາມບົດຮຽນບົດໜຶ່ງ. ໃຫ້ຄິດເຖິງວິທີທີ່ຈະສອນບົດຮຽນນີ້ໃນສະຖານທີ່ເພື່ອຊອກຫາ.
- ຄິດຫາວິທີທີ່ທ່ານຈະສາມາດເອົາຂ່າວສານນີ້ໄປກ່ຽວພັນກັບການຟື້ນຟູຢ່າງໄວໄດ້ແນວໃດ.
- ໃຫ້ແບ່ງປັນຂ່າວສານກັບຄູ່ສອນສາດສະໜາຂອງທ່ານ.
- ໃຫ້ຕັ້ງເປົ້າໝາຍເພື່ອຈະສອນຂ່າວສານນີ້ໃນເວລາທີ່ເໝາະສົມໃນມື້ນີ້ ເພື່ອເພີ່ມຜູ້ສົນໃຈໃໝ່ ໃສ່ກັບກຸ່ມທີ່ທ່ານກຳລັງສອນຢູ່.

---

- ໃຫ້ທົບທວນລາຍຊື່ຜູ້ຄົນທີ່ທ່ານສອນໃນປະຈຸບັນ. ໃຫ້ຂຽນລາຍຊື່ຂອງຜູ້ທີ່ທ່ານໄດ້ຂໍຊື່ຜູ້ຖືກແນະນຳ ແລະ ຜູ້ທີ່ທ່ານຍັງບໍ່ທັນໄດ້ຖາມເທື່ອ. ໃຫ້ຝຶກວິທີທີ່ທ່ານຈະເຊື້ອເຊີນຜູ້ຄົນໃນແຕ່ລະກຸ່ມໃຫ້ແນະນຳບາງຄົນ. ໃນປະຕິທິນປະຈຳວັນຂອງທ່ານ, ໃຫ້ຂຽນລົງວ່າ ທ່ານຈະເຮັດການເຊື້ອເຊີນນີ້ ຕອນໄປຢ້ຽມຢາມເທື່ອໜ້າ.

ໝາຍເຫດ

## ການກ່າວເຖິງຄວາມສຳຄັນຂອງຄອບຄົວ



ການຟື້ນຟູຂອງພະກິດຕິຄຸນຂອງພະເຢຊູຄິດໃຫ້ພອນແກ່ຄອບຄົວ. ໂດຍການດຳລົງຊີວິດຕາມຫລັກທຳຂອງພະກິດຕິຄຸນທີ່ຖືກຟື້ນຟູຄືນມາໃໝ່, ຄອບຄົວຈະໄດ້ເຂັ້ມແຂງຂຶ້ນ ແລະ ຈະສາມາດປະສົບກັບຄວາມສະຫງົບສຸກ, ຄວາມປິຕິຍິນດີ, ແລະ ຄວາມຮູ້ສຶກວ່າ ເຮົາເປັນຂອງຜູ້ໃດ ແລະ ເປັນໃຜ.

ການກ່າວເຖິງຄວາມສຳຄັນຂອງຄອບຄົວກັບຜູ້ທີ່ທ່ານພົບແຕ່ລະມື້ ຈະຊ່ອຍທ່ານໃຫ້ຊອກຫາຜູ້ຄົນ ເພື່ອຈະສອນ. ຕາມທຳມະຊາດ ຄົນສ່ວນຫລາຍຈະມີຄວາມສົນໃຈກັບຄອບຄົວ. ໃນສະພາບການພົບເຫັນສ່ວນຫລາຍ, ທ່ານສາມາດບັນຍາຍແບບໄວໆເຖິງສິ່ງທີ່ຄົນສ່ວນຫລາຍຮູ້ກ່ຽວກັບຄອບຄົວໃສ່ກັບຂ່າວສານຂອງການຟື້ນຟູ. ໃນເວລາຊອກຫາ, ທ່ານອາດຈະເວົ້າຄ້າຍໆກັບຄຳດັ່ງຕໍ່ໄປນີ້:

> *ສຳລັບເຮົາບໍ່ມີຫຍັງທີ່ສຳຄັນໄປກວ່າຄອບຄົວຂອງເຮົາ. ຄອບຄົວຂອງເຮົາຜູກເຮົາຕິດກັນ, ມອບຊື່ໃຫ້ເຮົາ, ແລະ ຊ່ອຍເຮົາໃຫ້ຮູ້ສຶກວ່າ ມີຄົນຕ້ອງການເຮົາ ແລະ ຮັກເຮົາ. ຈາກຄອບຄົວຂອງເຮົາ, ເຮົາໄດ້ຮັບບຸກຄະລິກລັກສະນະພິເສດ, ຄຸນສົມບັດ, ແລະ ລັກສະນະທາງຮ່າງກາຍ, ທີ່ເຮັດໃຫ້ເຮົາເປັນຜູ້ໜຶ່ງທີ່ພິເສດ.*
>
> *ໃນການມີຄອບຄົວທີ່ເຂັ້ມແຂງ ແລະ ເປັນສຸກ ເປັນສິ່ງທີ່ສຳຄັນທີ່ສຸດສຳລັບຫລາຍໆຄົນທົ່ວໂລກ. ການເຮັດໃຫ້ເປົ້າໝາຍນີ້ບັນລຸຄວາມສຳເລັດ ສ່ວນຫລາຍແລ້ວ ຈະຍາກທີ່ສຸດ. ການລ້ຽງລູກ ແລະ ການມີການແຕ່ງງານທີ່ເຂັ້ມແຂງໃນໂລກທຸກມື້ນີ້ ບາງເທື່ອກໍເກືອບເປັນໄປບໍ່ໄດ້ ເພາະຄວາມຊົ່ວຮ້າຍທີ່ອ້ອມຮອບເຮົາຢູ່ທົ່ວໄປ.*

ແລ້ວທ່ານຄວນເວົ້າປ່ຽນໄປຫາຂ່າວສານຂອງການຟື້ນຟູ:

> *ຄວາມຮູ້ສຶກເຖິງຄວາມຮັກ ແລະ ຄວາມຫ່ວງໃຍທີ່ເຮົາມີຕໍ່ຄອບຄົວເຮົາແມ່ນນິລັນດອນ ແລະ ມີຮາກເລິກພາຍໃນຈິດວິນຍານຂອງເຮົາ. ຈຸດສູນກາງຂອງມັນຄືຄວາມສຳພັນຂອງເຮົາກັບພະເຈົ້າ. ທ່ານໄດ້ເປັນພາກສ່ວນໃນຄອບຄົວຂອງພະເຈົ້າຕັ້ງແຕ່ກ່ອນທ່ານມາເກີດ. ພະອົງເປັນພະບິດາຂອງເຮົາ. ເພາະວ່າພະອົງເປັນພະບິດາຂອງເຮົາ, ສະນັ້ນ ເຮົາຈຶ່ງເປັນອ້າຍເອື້ອຍນ້ອງກັນ. ພະບິດາເທິງສະຫວັນປາກໃຫ້ເຮົາກັບຄືນໄປຢູ່ເປັນພາກສ່ວນ ໃນຄອບຄົວກັບພະອົງ. ຄອບຄົວຢູ່ໃນໂລກເປັນສາຍສຳພັນກັບຄອບຄົວພະເຈົ້າ ຄອບຄົວຈະສາມາດຢູ່ນຳ ກັນຫລັງຈາກຊີວິດນີ້. ພວກເຮົາຮູ້ເລື່ອງນີ້ເພາະວ່າຫລັງຈາກການເສຍໄປເປັນເວລາຫລາຍ ສັດຕະວັດ, ຄຳສອນ ແລະ ພິທີການທີ່ແທ້ຈິງ ດັ່ງການບັບຕິສະມາໂດຍລົງໄປໃນນ້ຳໝົດທັງຕົວ ໄດ້ຖືກຟື້ນຟູຄືນມາໃໝ່ສູ່ໂລກອີກໂດຍພະບິດາເທິງສະຫວັນທີ່ຊົງຮັກ ຜ່ານທາງສາດສະດາທີ່ມີຊີວິດຢູ່. ຄວາມຈິງທີ່ໄດ້ຟື້ນຟູຄືນມາໃໝ່ເຫລົ່ານີ້ ບໍ່ແມ່ນແຕ່ຊ່ອຍເຮົາໃຫ້ເຂົ້າໃຈສ່ວນຂອງເຮົາໃນຄອບຄົວຂອງພະເຈົ້າເທົ່ານັ້ນ, ແຕ່ມັນເປັນຄວາມຫວັງທີ່ຍິ່ງໃຫຍ່ທີ່ສຸດ ທີ່ເຮົາປາກມີຄອບຄົວທີ່ເຂັ້ມແຂງ ແລະ ເປັນສຸກໃນຊີວິດນີ້. ພວກເຮົາຂໍສອນທ່ານຕື່ມອີກໄດ້ບໍກ່ຽວກັບ . . .*

ວິທີດຽວກັນນີ້ ກໍໃຊ້ໄດ້ກັບຫົວຂໍ້ອື່ນໆ, ດັ່ງເຊັ່ນ ຄວາມສຸກ, ຄວາມລຳບາກ, ຈຸດປະສົງຂອງຊີວິດ, ຫລືການຕາຍ. ເຖິງແມ່ນວິທີການຊອກຫາຂອງທ່ານຈະເປັນແບບໃດກໍຕາມ, ໃຫ້ຈື່ຈຳທີ່ຈະເວົ້າຕໍ່ເຖິງຂ່າວສານພິເສດຂອງເຮົາຕໍ່ໂລກ.

## ຄວາມສຳຄັນຂອງສະມາຊິກ

ໃຫ້ຮ່ວມເຮັດວຽກງານກັບສະມາຊິກຂອງສາດສະໜາຈັກເພື່ອຊອກຫາຄົນທີ່ຈະສອນ. ສິ່ງທີ່ດີທີ່ສຸດ ແມ່ນສະມາຊິກເປັນຜູ້ເຊື້ອເຊີນຜູ້ອື່ນມາຮຽນ ແລະ ຢູ່ນຳໃນເວລາທ່ານສອນ. ເມື່ອສະມາຊິກເຮັດແບບນີ້, ຫລາຍຄົນຈະຮັບບັບຕິສະມາ ແລະ ເຂັ້ມແຂງຢູ່ໃນສາດສະໜາຈັກ. ຄວາມສຳພັນກັບສະມາຊິກແມ່ນສຳຄັນ ເພາະວ່າມັນ ເຮັດໃຫ້ຫົວໃຈຂອງຜູ້ຄົນອ່ອນໂຍນ ແລະ ນຳພາເຂົາເຈົ້າໃຫ້ເກີດຄວາມສົນໃຈພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ ນີ້ໝາຍຄວາມວ່າ ເຂົາເຈົ້າໄດ້ເຂົ້າມາໃນວົງຂອງໝູ່ເພື່ອນໃນສາດສະໜາຈັກ, ຮ່ວມທັງສະມາຊິກທີ່ເຂັ້ມແຂງ ແລະ ບໍ່ເຂັ້ມແຂງ, ສະມາຊິກໃໝ່, ແລະ ຄອບຄົວທີ່ບໍ່ແມ່ນສະມາຊິກທັງໝົດ.

ໝາຍເຫດ

ປະທານ ກໍດອນ ບີ ຮິງລີ ໄດ້ສອນວ່າ: "ເຮົາສ່ວນຫລາຍຖືວ່າວຽກງານການເຜີຍແຜ່ຄືການແຈກຢາຍປຶ້ມຫົວນ້ອຍໆທີ່ກ່າວເຖິງສາດສະໜາເທົ່ານັ້ນ. ທຸກຄົນທີ່ລື້ງເຄີຍກັບວຽກງານນີ້ ຮູ້ດີວ່າມີທາງອື່ນທີ່ດີກວ່ານີ້. ທາງນັ້ນຄືຜ່ານສະມາຊິກຂອງສາດສະໜາຈັກ. ເມື່ອໃດທີ່ສະມາຊິກແນະນຳຜູ້ສົນໃຈ, ກໍມີລະບົບສົ່ງເສີມໃນທັນທີ. ສະມາຊິກຄົນນັ້ນຈະສະແດງປະຈັກພະຍານຕໍ່ຄວາມຈິງຂອງວຽກງານ. ເຂົາຕື່ນເຕັ້ນເພື່ອຄວາມສຸກຂອງເພື່ອນຜູ້ສົນໃຈຂອງເຂົາ. ເຂົາດີໃຈເມື່ອເພື່ອນຜູ້ນັ້ນກ້າວໜ້າໃນການຮຽນຮູ້ພະກິດຕິຄຸນ.

> *"ຫລັງຈາກທຸກສິ່ງທີ່ໄດ້ເວົ້າແລ້ວ, ໜ້າທີ່ຍິ່ງໃຫຍ່ ແລະ ສຳຄັນທີ່ສຸດແມ່ນການປະກາດພະກິດຕິຄຸນ."*
>
> – ສາດສະດາ ໂຢເຊັບ ສະມິດ
>
> *TEACHINGS OF THE PROPHET JOSEPH SMITH*, 113

"ຜູ້ສອນສາດສະໜາເຕັມເວລາຈະເປັນຜູ້ສອນ, ແຕ່ສະມາຊິກ, ເມື່ອເປັນໄປໄດ້, ຈະສະໜັບສະໜູນຄຳສອນນັ້ນດ້ວຍການສະເໜີໃຫ້ຜູ້ສອນສາດສະໜາມາສອນຜູ້ສົນໃຈຢູ່ເຮືອນເຂົາ ເພື່ອດຳເນີນການເຜີຍແຜ່ນີ້ຕໍ່ໄປ. ເຂົາຈະກ່າວປະຈັກພະຍານທີ່ຈິງຈັງກ່ຽວກັບວຽກງານທີ່ສັກສິດນີ້. ເຂົາຈະຢູ່ຕອບຄຳຖາມເມື່ອຜູ້ສອນສາດສະໜາບໍ່ໄດ້ຢູ່ໃກ້. ເຂົາຈະເປັນໝູ່ກັບສະມາຊິກໃໝ່ທີ່ກຳລັງປັບຕົວຢ່າງໃຫຍ່ ແລະ ສ່ວນຫລາຍຈະຍາກ. . . . ວິທີການນຳພາຄົນໃໝ່ເຂົ້າມາໃນສາດສະໜາຈັກ ບໍ່ແມ່ນຄວາມຮັບຜິດຊອບຂອງຜູ້ສອນສາດສະໜາແຕ່ຝ່າຍດຽວ. ເຂົາຈະສຳເລັດດີເມື່ອສະມາຊິກກາຍເປັນຜູ້ຊ່ອຍຕົ້ນຕໍ ເຊິ່ງຈາກການນັ້ນຜູ້ສອນສາດສະໜາຈະໄດ້ພົບເຫັນຜູ້ສົນໃຈໃໝ່" (*Ensign*, May 1999, 105–6).

ຈຸດເລີ່ມຕົ້ນໃນການສ້າງຄວາມສຳພັນທີ່ເຂັ້ມແຂງກັບສະມາຊິກແມ່ນອະທິການ. ໃຫ້ສະເໜີການຊ່ອຍເຫລືອ ແລະ ຮັບໃຊ້ຕາມທີ່ເພິ່ນຮ້ອງຂໍໃນທາງໃດກໍຕາມທີ່ຊອບທຳ. ໃຫ້ຖາມຕົນເອງເປັນປະຈຳວ່າ, "ເຮົາໄດ້ເປັນພອນ ຫລື ເປັນພາລະໃຫ້ອະທິການ?" ໃຫ້ພັດທະນາທ່າທາງທີ່ວ່າ "ເຮົາຊ່ອຍຫຍັງໄດ້ແດ່?" ຖ້າຫາກທ່ານຊອກຫາໂອກາດທີ່ຈະຮັກ, ຮັບໃຊ້, ແລະ ສອນ, ແລ້ວອະທິການ ແລະ ສະມາຊິກໃນຫວອດ ຈະໄວ້ວາງໃຈທ່ານກັບຄົນໃນຄອບຄົວ ແລະ ໝູ່ເພື່ອນຂອງເຂົາເຈົ້າ.

ໃຫ້ພິຈາລະນາຂໍ້ຄວາມຈາກໜັງສືທີ່ຜູ້ສອນສາດສະໜາຄົນໜຶ່ງໄດ້ຂຽນຫາປະທານເຜີຍແຜ່ຂອງລາວ:

> *ປະທານທີ່ຮັບແພງ,*
>
> *ຜູ້ຊ່ອຍຂອງທ່ານໄດ້ໂທມາບອກວ່າ ຂ້ານ້ອຍຈະໄດ້ຍ້າຍ. ຂ້ານ້ອຍຮູ້ສຶກວ່າ ຂ້ານ້ອຍຄວນຂຽນ ແລະ ຂອບໃຈທ່ານທີ່ໄດ້ສົ່ງຂ້ານ້ອຍມາເຂດນີ້. ເບິ່ງຄືວ່າມື້ວານນີ້ເອງ ທີ່ທ່ານໄດ້ບອກຂ້ານ້ອຍເຖິງການທ້າທາຍທີ່ຢູ່ຂ້າງໜ້າ.*
>
> *ວັນອາທິດທຳອິດຂອງພວກຂ້ານ້ອຍໄດ້ຢືນຢັນສິ່ງທີ່ທ່ານບອກຂ້ານ້ອຍ. ພວກຂ້ານ້ອຍໄດ້ຖືກຕ້ອນຮັບດ້ວຍຄວາມບໍ່ສົນໃຈ. ສິ່ງທີ່ດີສິ່ງດຽວໃນວັນອາທິດທຳອິດນັ້ນຄື ສະກອດ, ຜູ້ທີ່ເປັນຜູ້ນຳເຜີຍແຜ່ປະຈຳຫວອດ. ລາວໄດ້ຖືກສົ່ງໄປປະຈຳການຢູ່ຖ້າຍທະຫານອາກາດເດືອນກ່ອນ ແລະ ໄດ້ຮັບໃຊ້ເປັນຜູ້ນຳເຜີຍແຜ່ປະຈຳຫວອດໄດ້ສອງອາທິດມານີ້. ສະກອດໄດ້ເຊີນພວກຂ້ານ້ອຍໄປກິນເຂົ້າແລງຢູ່ບ້ານຂອງລາວ ວັນອາທິດທຳອິດນັ້ນ ເພື່ອສົນທະນາກ່ຽວກັບສິ່ງທີ່ຈະເຮັດເພື່ອໃຫ້ວຽກງານເຄື່ອນໄປອີກ. ຫລັງຈາກກິນເຂົ້າແລ້ວ, ພວກຂ້ານ້ອຍໄດ້ຄຸເຂົ່າອະທິຖານ ແລະ ໄດ້ທູນຂໍການຊີ້ນຳຈາກພະບິດາເທິງສະຫວັນ. ໃນຂະນະທີ່ພວກຂ້ານ້ອຍອະທິຖານ, ພວກຂ້ານ້ອຍໄດ້ຮູ້ສຶກວ່າມີຄວາມສະຫງົບ ແລະ ມີຄວາມຕັ້ງໃຈ. ພວກຂ້ານ້ອຍໄດ້ຕັ້ງໃຈວ່າ ທາງທີ່ດີທີ່ສຸດ ທີ່ຈະເຮັດໃຫ້ວຽກງານເຄື່ອນໄປໜ້າ ຄືການໄດ້ຮັບຄວາມໄວ້ວາງໃຈຈາກສະມາຊິກ. ພວກຂ້ານ້ອຍໄດ້ຕັດສິນໃຈທີ່ຈະເຮັດຕາມຕົວຢ່າງຂອງແອມັນ ແລະ ຮັບໃຊ້ເຂົາເຈົ້າ.*
>
> *ພວກຂ້ານ້ອຍໄດ້ເລີ່ມຈາກອະທິການ. ຍ້ອນວ່າບໍ່ມີການບັບຕິດສະມາໃນເຂດນັ້ນ ແລະ ຜູ້ສອນສາດສະໜາຊຸດກ່ອນບໍ່ໄດ້ໃຊ້ຄວາມພະຍາຍາມຫລາຍ, ເພິ່ນຈຶ່ງບໍ່ຕື່ນເຕັ້ນປານໃດເມື່ອພວກຂ້ານ້ອຍຂໍພົບເພິ່ນ. ແຕ່ຕໍ່ມາເພິ່ນໄດ້ເຊີນພວກຂ້ານ້ອຍໄປກິນເຂົ້າແລງຢູ່ບ້ານຂອງເພິ່ນ. ພວກຂ້ານ້ອຍໄດ້ຮຽນຮູ້ວ່າ ອະທິການກຳລັງຕຽມຈະຍ້າຍພົມອອກຈາກຫ້ອງຮັບແຂກ ແລະ ສ້ອມແປງເອົາແປ້ນທີ່ຢູ່ກ້ອງພົມນັ້ນ. ພວກຂ້ານ້ອຍ ໄດ້ສະໝັກໃຫ້ຄວາມຊ່ອຍເຫລືອ ແລະ ເພິ່ນກໍຍອມຮັບ. ເມື່ອວຽກນັ້ນຈົບລົງ, ອະທິການໄດ້ຂໍໃຫ້ພວກຂ້ານ້ອຍກ່າວຄຳປາໄສຢູ່ໃນກອງປະຊຸມສິນລະລຶກ. ພວກຂ້ານ້ອຍຈຶ່ງຖືຫລັກຖານນີ້ວ່າ ເພິ່ນກຳລັງເລີ່ມໄວ້ວາງໃຈພວກຂ້ານ້ອຍ.*
>
> *ພວກຂ້ານ້ອຍໄດ້ເຮັດຕາມແບບແຜນການຮັບໃຊ້ນີ້ເມື່ອ ພວກຂ້ານ້ອຍໄດ້ພົບກັບສະມາຊິກຄົນອື່ນ. ພວກຂ້ານ້ອຍໄດ້ຫາໂອກາດທີ່ຈະຊ່ອຍເຂົາເຈົ້າໃນຫລາຍໆທາງທີ່ງ່າຍ. ເວລາພວກຂ້ານ້ອຍບໍ່ໄດ້ຢູ່ກັບສະມາຊິກ, ພວກຂ້ານ້ອຍໄດ້ໄປເລາະເຄາະປະຕູ ແລະ ເວົ້າກັບຫລາຍຄົນເທົ່າທີ່ພວກຂ້ານ້ອຍຈະເຮັດໄດ້ກ່ຽວກັບພະກິດຕິຄຸນ ທີ່ໄດ້ຖືກຟື້ນຟູຄືນມາໃໝ່. ພວກຂ້ານ້ອຍໄດ້ຮັບພອນທີ່ມີຄົນເພື່ອສອນ, ແລະ ສະມາຊິກໄດ້ເຫັນພວກຂ້ານ້ອຍພາຄົນທີ່ພວກຂ້ານ້ອຍຊອກເຫັນດ້ວຍຕົວເອງມາໂບດ. ທ່າທາງຂອງສະມາຊິກທັງໝົດໃນຫວອດໄດ້ເລີ່ມປ່ຽນແປງ. ມັນໄດ້ມີຄວາມຕື່ນເຕັ້ນຫລາຍຂຶ້ນກ່ຽວກັບວຽກງານເຜີຍແຜ່. ເມື່ອສະມາຊິກໄວ້ວາງໃຈພວກຂ້ານ້ອຍ, ແລ້ວວຽກງານໄດ້ກ້າວໄປໜ້າຢ່າງໄວ ຕິດຕາມດ້ວຍການບັບຕິດສະມາໃຫ້ຫລາຍຄົນ.*

ໝາຍເຫດ



ສະມາຊິກຂອງສາດສະໜາຈັກຫລາຍຄົນມີຄວາມຢ້ານກົວກ່ຽວກັບການເຮັດວຽກງານການເຜີຍແຜ່ຫລາຍຄົນກໍບໍ່ແນ່ໃຈວ່າຈະເລີ່ມຢູ່ໃສ ຫລື ເວົ້າແນວໃດ. ຫລາຍຄົນຢ້ານວ່າເຂົາເຈົ້າຈະເສຍໝູ່ເພື່ອນທີ່ໃກ້ຊິດໄປ ຖ້າຫາກເຂົາເຈົ້າພະຍາຍາມແບ່ງປັນພະກິດຕິຄຸນໃຫ້ໝູ່. ມັນມີຫລາຍວິທີທາງທີ່ຈະຊ່ອຍສະມາຊິກໄດ້. ຕົວຢ່າງຄື, ຊ່ອຍສ້າງສັດທາຂອງເຂົາເຈົ້າໂດຍການສອນຂ່າວສານຂອງການຟື້ນຟູ ແລະ ຄຳສອນອື່ນໆໃນບົດຮຽນໃຫ້ເຂົາເຈົ້າ. ຊ່ອຍໃຫ້ເຂົາຮູ້ສຶກເຖິງພະວິນຍານ ແລະ ພະລັງຂອງຂ່າວສານຂອງເຮົາ. ການເຮັດໃຫ້ເຂົາເຈົ້າມີຄວາມເຂົ້າໃຈຫລາຍຂຶ້ນກ່ຽວກັບຄຳສອນຂອງພະຄິດ ຈະເຮັດໃຫ້ເຂົາເຈົ້າມີຄວາມໄວ້ວາງໃຈໃນຕົວທ່ານ ແລະ ຈະເຮັດໃຫ້ເຂົາເຈົ້າມີຄວາມຕື່ນເຕັ້ນຕໍ່ວຽກງານເຜີຍແຜ່ຫລາຍກວ່າສິ່ງອື່ນໆທີ່ທ່ານຈະສາມາດເຮັດໄດ້. ຊ່ອຍໃຫ້ເຂົາເຈົ້າເຂົ້າໃຈວ່າ ການແບ່ງປັນພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ ຈະເປັນຄືກັບນ້ຳໄຫລແບບທຳມະຊາດຈາກຄວາມສຳພັນທີ່ເຂົາສະແຫວງທີ່ຈະຮັກ ແລະ ຮັບໃຊ້ສະມາຊິກໃນຄອບຄົວ ແລະ ໝູ່ເພື່ອນ. ໃຫ້ສອນເຂົາເຈົ້າເຖິງຫລັກທຳຈາກພາກ "ໄປທຸກຫົນທຸກແຫ່ງເຮັດຄຸນງາມຄວາມດີ" ໃນບົດນີ້ ຊຸກຍູ້ໃຫ້ສະມາຊິກຮ່ວມເຮັດການຖືສິນອົດເຂົ້າ ແລະ ອະທິຖານຢ່າງສຸດກຳລັງນຳທ່ານ ເພື່ອຄວາມຜາສຸກຂອງຈິດວິນຍານຂອງຜູ້ຄົນທີ່ບໍ່ຮູ້ຈັກພະເຈົ້າ (see Alma 6:6). ໃນທຸກສິ່ງທີ່ທ່ານເຮັດກັບສະມາຊິກ, ໃຫ້ສະແຫວງເຮັດເພື່ອການຍົກ ແລະ ສ້າງສັດທາຂອງເຂົາເຈົ້າ ທີ່ຈະຊ່ອຍເຂົາເຈົ້າໃຫ້ເຮັດວຽກງານເຜີຍແຜ່.

ນອກເໜືອໄປຈາກການເຮັດວຽກງານກັບສະມາຊິກທີ່ເຂັ້ມແຂງແລ້ວ, ໃຫ້ສະແຫວງຫາຜູ້ຄົນເພື່ອຈະສອນຜ່ານທາງຜູ້ທີ່ຈະເປັນແອວເດີ, ສະມາຊິກທີ່ບໍ່ເຂັ້ມແຂງ, ແລະ ສະມາຊິກໃໝ່. ສ່ວນຫລາຍແລ້ວ ສະມາຊິກເຫລົ່ານີ້ຈະມີສະມາຊິກໃນຄອບຄົວ ແລະ ໝູ່ເພື່ອນທີ່ຖືສາດສະໜາອື່ນ ແລະ ຈະໄດ້ຮັບພອນເມື່ອເຂົາແບ່ງປັນພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່ກັບສະມາຊິກໃນຄອບຄົວ ແລະ ໝູ່ເພື່ອນຂອງເຂົາ.

ໃນທຸກໆເທື່ອທີ່ທ່ານໄປຢ້ຽມຢາມສະມາຊິກ, ໃຫ້ເຮັດຈົນສຸດຄວາມສາມາດເພື່ອຊຸກຍູ້ເຂົາເຈົ້າໃຫ້:

- ອະທິຖານ ແລະ ເຮັດຕາມພະວິນຍານ.
- ໃຫ້ການຮັບໃຊ້.
- ພັດທະນາຄວາມເປັນມິດ.
- ເປີດປາກເພື່ອແບ່ງປັນພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່.
- ເຊື້ອເຊີນໃຫ້ຜູ້ອື່ນເຮັດສິ່ງໃດສິ່ງໜຶ່ງທີ່ຈະເພີ່ມສັດທາຂອງເຂົາໃນພະຄິດ.

ຊື່ຜູ້ຖືກແນະນຳທຸກໆຄົນທີ່ທ່ານໄດ້ຮັບຈາກສະມາຊິກ ຄວນນັບຖືວ່າເປັນສິ່ງທີ່ລ້ຳຄ່າ. ເມື່ອສະມາຊິກເອົາຊື່ໝູ່ເພື່ອນໃຫ້ທ່ານເພື່ອໃຫ້ໂທຫາ ຫລື ໄປຢ້ຽມຢາມ, ໃຫ້ທ່ານເຮັດໃນໄວໆ ແລະ ລາຍງານຜົນໃຫ້ສະມາຊິກຄົນນັ້ນຮູ້.

## ແນວຄິດເພື່ອຊ່ອຍສະມາຊິກ

ມີຫລາຍວິທີທາງທີ່ຈະຊຸກຍູ້ສະມາຊິກໃຫ້ກ່ຽວຂ້ອງຫລາຍຂຶ້ນກັບວຽກງານເຜີຍແຜ່. ໃຫ້ພິຈາລະນາແນວຄິດດັ່ງຕໍ່ໄປນີ້:

- ໃຫ້ສະແຫວງຫາການແນະນຳຈາກອະທິການ ແລະ ຜູ້ນຳຄົນອື່ນໆໃນຫວອດ. ໃຫ້ເບິ່ງບົດທີ 13 ສຳລັບຄວາມຊ່ອຍເຫລືອເພີ່ມເຕີມກ່ຽວກັບເລື່ອງນີ້.
- ໃຫ້ສອນຜູ້ນຳໃນໂບດ ແລະ ສະມາຊິກເຖິງຂ່າວສານຂອງການຟື້ນຟູ ແລະ ບົດຮຽນອື່ນໆ.
- ສອນເຂົາເຈົ້າໃຫ້ຮັກ ແລະ ຮັບໃຊ້ເພື່ອນບ້ານ ແລະ ໝູ່ເພື່ອນຂອງເຂົາເຈົ້າ.
- ຊຸກຍູ້ເຂົາເຈົ້າໃຫ້ຖືສິນອົດເຂົ້າ ແລະ ອະທິຖານຫາໂອກາດທີ່ຈະໄດ້ເຜີຍແຜ່.

ໝາຍເຫດ

- ຊຸກຍູ້ເຂົາໃຫ້ໄປຢ້ຽມຢາມຄົນທີ່ເຂົາຮູ້ຈັກ ຜູ້ທີ່ໄດ້ປະສົບການປ່ຽນແປງໃນຊີວິດ (ການເກີດ, ການຕາຍໃນຄອບຄົວ, ການແຕ່ງງານ, ຫລືການຍ້າຍໃນບໍ່ດົນມານີ້).
- ເຊື້ອເຊີນເຂົາໃຫ້ຊ່ອຍທ່ານສອນ. ສິ່ງທີ່ດີທີ່ສຸດແມ່ນໃຫ້ສະມາຊິກຂອງສາດສະໜາຈັກ ຜູ້ເຄີຍນັບຖືສາດສະໜາດຽວກັນກັບຜູ້ສົນໃຈ ມີໜ້າຢູ່ນຳ.
- ຊ່ອຍເຂົາໃຫ້ຈັດວັນທີ່ຈະເຊື້ອເຊີນໝູ່ເພື່ອນຂອງເຂົາໃຫ້ມາຮຽນກ່ຽວກັບຂ່າວສານຂອງການຟື້ນຟູ.
- ໃຫ້ເຂົາເບິ່ງສິ່ງທີ່ເຂົາສາມາດມອບໃຫ້ຜູ້ອື່ນ, ດັ່ງເຊັ່ນ ພະຄຳພີມໍມອນ, ໜັງ, ແລະ ບັດນ້ອຍສິ່ງຕໍ່.
- ຊຸກຍູ້ເຂົາໃຫ້ເຊື້ອເຊີນໝູ່ເພື່ອນຂອງເຂົາໃຫ້ໄປໂບດ ຫລື ໄປຮ່ວມການສັງສັນໃນຄອບຄົວ, ເບິ່ງໜັງຂອງສາດສະໜາຈັກ, ຫລືເຂົ້າຮ່ວມໃນການສົນທະນາເລື່ອງພະກິດຕິຄຸນ.
- ຊ່ອຍເຂົາຝຶກສິ່ງທີ່ເຂົາຄວນເວົ້າກັບໝູ່ເພື່ອນຂອງເຂົາ.
- ສອນເຂົາວ່າເປັນຫຍັງມັນຈຶ່ງມີຄ່າຫລາຍທີ່ຈະແບ່ງປັນພະກິດຕິຄຸນ ເຖິງແມ່ນວ່າຜົນທີ່ຕາມມາຈະເປັນຢ່າງໃດກໍຕາມ.

ມີຫລາຍວິທີທາງອື່ນອີກທີ່ຈະຊ່ອຍສະມາຊິກໃຫ້ມີສ່ວນຮ່ວມຫລາຍຂຶ້ນ. ໃຫ້ຊອກຫາທາງອື່ນເພື່ອເອົາມາຕື່ມໃສ່ລາຍການນີ້ ຕະຫລອດການເຜີຍແຜ່ຂອງທ່ານ. ໃຫ້ແບ່ງປັນແນວຄິດຂອງທ່ານກັບຜູ້ສອນສາດສະໜາຄົນອື່ນໆ.

**ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ**

ກັບຄູ່ສອນສາດສະໜາຂອງທ່ານ, ໃຫ້ທົບທວນສິ່ງທີ່ທ່ານໄດ້ເຮັດ ເພື່ອຮັບໃຊ້ ແລະ ຊ່ອຍເຫລືອອະທິການ ແລະຜູ້ນຳຄົນອື່ນໆ ແລະ ສະມາຊິກພາຍໃນໜຶ່ງເດືອນທີ່ຜ່ານມາ. ໃຫ້ສົນທະນາ ແລະ ວາງແຜນສິ່ງທີ່ທ່ານສາມາດເຮັດໄດ້ໃນເດືອນທີ່ຈະມາເຖິງ ເພື່ອພັດທະນາຄວາມສຳພັນຂອງທ່ານກັບເຂົາເຈົ້າໃຫ້ແໜ້ນແຟ້ນຫລາຍຂຶ້ນ.

ໃຫ້ທົບທວນແນວຄິດ ໃນໜ້າ "ແນວຄິດເພື່ອຊ່ອຍສະມາຊິກ." ໃຫ້ຊອກຫາແນວຄິດບາງຢ່າງທີ່ທ່ານຍັງບໍ່ໄດ້ລອງໃຊ້ເທື່ອ. ໃຫ້ໃຊ້ປະຕິທິນປະຈຳວັນຂອງທ່ານ ເພື່ອວາງແຜນ ແລະ ລອງໃຊ້ແນວຄິດບາງຢ່າງໃນອາທິດທີ່ຈະມາເຖິງ.

## ຜູ້ຖືກແນະນຳຈາກການສື່ສານ ແລະ ສູນກາງຂອງສາດສະໜາຈັກ

ການແນະນຳກໍເປັນແຫລ່ງໜຶ່ງອີກໃນການຊອກຫາຜູ້ຄົນທີ່ໄດ້ຕຽມພ້ອມແລ້ວ ເພື່ອຮັບພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່. ນອກເໜືອໄປຈາກການແນະນຳຂອງສະມາຊິກແລ້ວ, ສາດສະໜາຈັກຍັງໄດ້ພະຍາຍາມຊອກຫາລູກໆຂອງພະເຈົ້າໃນຫລາຍໆທາງອື່ນອີກ. ສາດສະໜາຈັກໄດ້ສ້າງຄວາມສົນໃຈຜ່ານທາງອື່ນໆ ດັ່ງເຊັ່ນ ການໂຄສະນາທາງສື່ສານ, ທາງສູນກາງ ການຢ້ຽມຢາມ, ທາງສະຖານທີ່ປະຫວັດສາດ, ທາງສະຫວັດດີການ, ທາງການຊ່ອຍເຫລືອມະນຸດຊາດ, ແລະທາງອິນເຕີແນັດ (www.mormon.org, www.lds.org, www.familysearch.org). ຜູ້ຖືກແນະນຳທີ່ໄດ້ຮັບຈາກການສື່ສານ ແລະ ສູນກາງຂອງສາດສະໜາຈັກ ເປັນການບອກເຖິງຜູ້ຄົນທີ່ໄດ້ຕົກລົງທີ່ຈະໃຫ້ຜູ້ແທນຂອງສາດສະໜາຈັກໄປຢ້ຽມຢາມເພື່ອສົ່ງຂອງ (ດັ່ງເຊັ່ນ ພະຄຳພີໄບເບິ້ນ ຫລື ພະຄຳພີມໍມອນ) ແລະ ຮັບການສິດສອນເພີ່ມເຕີມກ່ຽວກັບສາດສະໜາຈັກ. ຜູ້ສອນສາດສະໜາຄວນຖືໂອກາດທີ່ຈະສອນ ວ່າເປັນການຮັບຜິດຊອບທີ່ສັກສິດ.

ກ່ອນທ່ານຈະໄປຢ້ຽມຢາມຜູ້ຖືກແນະນຳ, ໃຫ້ແນ່ໃຈວ່າ ທ່ານຮູ້ຈັກສິ່ງຂອງທີ່ເຂົາເຈົ້າໄດ້ຂໍຮ້ອງນັ້ນດີ. ໃຫ້ວາງແຜນສອນບົດຮຽນສັ້ນໆເພື່ອປ່ຽນຈາກການເວົ້າລົມກ່ຽວກັບສິ່ງຂອງໄປຫາການສອນຂ່າວສານການຟື້ນຟູ. ໃນບາງກໍລະນີ ຜູ້ຖືກແນະນຳຈະນຳພາທ່ານໄປຫາຜູ້ອື່ນທີ່ພະເຈົ້າໄດ້ຕຽມໄວ້ໃຫ້. ຖ້າຫາກວ່າຜູ້ທີ່ທ່ານຕິດຕໍ່ ບໍ່ສົນໃຈ, ໃຫ້ຖາມເຂົາເຈົ້າວ່າ ເຂົາເຈົ້າຮູ້ຈັກຄົນໃດບໍທີ່ອາດສົນໃຈ. ພ້ອມນີ້, ໃຫ້ລົມກັບສະມາຊິກໃນຄອບຄົວນັ້ນ ຫລືເພື່ອນບ້ານຂອງເຂົາເຈົ້າ. ບາງທີທ່ານໄດ້ຖືກນຳພາມາຫາຄົນຜູ້ນີ້ເພາະວ່າມີຜູ້ອື່ນໃນຄອບຄົວ ຫລື ໝູ່ບ້ານທີ່ຕຽມພ້ອມແລ້ວເພື່ອຮັບພະກິດຕິຄຸນ.

ເມື່ອເຮັດວຽກງານກັບຜູ້ຖືກແນະນຳ, ໃຫ້ຈື່ຈຳທີ່ຈະ:

- ຕິດຕໍ່ຫາເຂົາເຈົ້າພາຍໃນ 24 ຊົ່ວໂມງ.

ໝາຍເຫດ

- ຖ້າຫາກເປັນໄປໄດ້, ໃຫ້ໂທນັດກ່ອນໄປຢ້ຽມຢາມ. ຖ້າຫາກເຂົາເຈົ້າບໍ່ຢູ່ເຮືອນ, ໃຫ້ລອງຕິດຕໍ່ໃນເວລາອື່ນ.
- ໃຫ້ເອົາສິ່ງຂອງທີ່ໄດ້ຂໍຮ້ອງໄປສົ່ງຢູ່ບ້ານ, ແລະ ບອກເຂົາເຈົ້າວ່າ ທ່ານມາຕາມການຂໍຮ້ອງຂອງເຂົາເຈົ້າ. ໃຫ້ເຕົ້າໂຮມທຸກຄົນໃນຄອບຄົວໃຫ້ມາຟັງນຳກັນ.
- ໃຫ້ສອນຂ່າວສານຂອງການຟື້ນຟູ.
- ໃຫ້ການເຊື້ອເຊີນທີ່ຈະສ້າງສັດທາຂອງເຂົາເຈົ້າໃນພະຄຣິດ.
- ຂໍໃຫ້ເຂົາເຈົ້າແນະນຳຊື່ຂອງບາງຄົນ.
- ໃຫ້ຈັດເວລາທີ່ຈະກັບໄປຢ້ຽມຢາມ.
- ໃຫ້ວາງແຜນທີ່ຈະເຜີຍແຜ່ຕໍ່ໄປໃນແຖວໝູ່ບ້ານນັ້ນ ຫລັງຈາກການນັດຂອງທ່ານສິ້ນສຸດລົງແລ້ວ.
- ຖ້າຫາກວ່າຜູ້ສົນໃຈບໍ່ຢູ່ບ້ານ, ໃຫ້ເວົ້າລົມກັບເພື່ອນບ້ານແຖວນັ້ນ.

**ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ**

ໃຫ້ຊອກຫາຜູ້ຖືກແນະນຳທຸກຄົນໃນເຂດຂອງທ່ານ ທີ່ທ່ານໄດ້ຮັບພາຍໃນເດືອນກ່ອນ. ໃຫ້ຈຳແນກລາຍຊື່ຂອງຜູ້ທີ່ຍັງບໍ່ໄດ້ຕິດຕໍ່ເທື່ອ, ແລະ ໃຫ້ໄປຢ້ຽມຢາມເຂົາເຈົ້າ. ໃຫ້ຕັດສິນໃຈວ່າ ໃນຈຳນວນຜູ້ທີ່ທ່ານໄດ້ຕິດຕໍ່ແລ້ວ, ທ່ານຄວນຕິດຕໍ່ຜູ້ໃດຄືນອີກ.

## ປະຫວັດຄອບຄົວ

ປະຫວັດຄອບຄົວ ຫລື ການສືບລຳດັບເຊື້ອສາຍເປັນທາງໜຶ່ງອີກ ທີ່ທ່ານຈະສາມາດຊອກຫາຄົນເພື່ອຈະສອນ. ໃນປະຈຸບັນນີ້ ປະຫວັດຄອບຄົວເປັນວຽກໃນເວລາຫວ່າງທີ່ຄົນມັກເຮັດຢູ່ທົ່ວໂລກ. ວິນຍານຂອງເອລີຢາກຳລັງດົນໃຈຄົນເປັນລ້ານໆທົ່ວໂລກໃຫ້ຄົ້ນຫາບັນພະບຸລຸດຂອງເຂົາ. ຄົນຢ່າງຫລວງຫລາຍ ມີຄວາມປາດຖະໜາຢາກມີການຕິດຕໍ່ກັບຍາດພີ່ນ້ອງຂອງເຂົາ. ການເຮັດສິ່ງນີ້ຈະນຳພາເຂົາໃຫ້ມີຄວາມປາດຖະໜາຢາກຕິດຕໍ່ ແລະ ຢາກຮູ້ວ່າເຂົາເປັນໃຜກັບຄອບຄົວຂອງພະເຈົ້າ.

ໃຫ້ເບິ່ງວ່າມີແຫລ່ງໃດແດ່ກ່ຽວກັບປະຫວັດຄອບຄົວໃນເຂດຂອງທ່ານ. ຕົວຢ່າງຄື, ທ່ານອາດຈະຊວນຜູ້ຄົນໄປສູນປະຫວັດຄອບຄົວໃນທ້ອງຖິ່ນ ແລະ ແນະນຳເຂົາເຈົ້າຕໍ່ສະມາຊິກທີ່ຈະສາມາດຊ່ອຍເຂົາເຈົ້າເລີ່ມຕົ້ນເຮັດການຄົ້ນຄວ້າຫາເຊື້ອສາຍຂອງເຂົາເຈົ້າ. ທ່ານບໍ່ຈຳເປັນຕ້ອງຮູ້ຫຍັງຫລາຍກ່ຽວກັບປະຫວັດຄອບຄົວ ເພື່ອຈະໃຫ້ຄວາມຊ່ອຍເຫລືອໃນເລື່ອງນີ້ ຖ້າຫາກທ່ານໄດ້ຮັບຄວາມຊ່ອຍເຫລືອຈາກສະມາຊິກໃນສາດສະໜາຈັກ. ໃນຫລາຍໆເຂດທົ່ວໂລກ, ມີສະມາຊິກທີ່ສາມາດຊ່ອຍຜູ້ອື່ນຄົ້ນຄວ້າຫາເຊື້ອສາຍຂອງເຂົາເຈົ້າໄດ້. ໃຫ້ສະມາຊິກມີສ່ວນຮ່ວມ ເພື່ອຜູ້ອາດຈະສົນໃຈ ຈະໄດ້ພົບຜູ້ຄົນທີ່ຈະສາມາດສ້າງມິດຕະພາບກັບເຂົາ. ໃຫ້ອະທິບາຍວ່າ ເຂົາເຈົ້າສາມາດໃຊ້ສູນປະຫວັດຄອບຄົວນີ້ຢ່າງບໍ່ຕ້ອງເສຍຄ່າ.

> "ຂ້າພະເຈົ້າຫວັງຈະເຫັນພວກເຮົາລະລາຍເຂດແດນປອມທີ່ເຮົາມັກເອົາມາຕັ້ນທາງວຽກງານການເຜີຍແຜ່ ແລະ ວຽກງານພະວິຫານ ແລະ ວຽກງານການສືບລຳດັບເຊື້ອສາຍໃຫ້ໝົດໄປ, ເພາະວ່າມັນເປັນວຽກງານການໄຖ່ທີ່ຍິ່ງໃຫຍ່ອັນດຽວກັນ!"
>
> – ປະທານ ສະເປັນເຊີ ດັບເບິນຢູ ຄິມໂບ
>
> "THE THINGS OF ETERNITY—STAND WE IN JEOPARDY?" *ENSIGN*, JAN. 1977, 3

ເມື່ອທ່ານໄປເລາະຊອກຫາຄົນ, ທ່ານສາມາດແຈກຢາຍບັດນ້ອຍກ່ຽວກັບປະຫວັດຄອບຄົວ ທີ່ມີເລກໂທລະສັບຂອງສູນປະຫວັດຄອບຄົວໃນທ້ອງຖິ່ນໃຫ້ຜູ້ຄົນ, ເພື່ອໄປຄົ້ນຄວ້າຫາເຊື້ອສາຍຂອງເຂົາເຈົ້າ ຢ່າງບໍ່ຕ້ອງເສຍຄ່າ. ໃຫ້ກັບໄປເຮືອນທີ່ທ່ານໄດ້ມອບບັດນັ້ນໃຫ້ ເພື່ອຕິດຕາມຜົນ ພາຍໃນມື້ໜຶ່ງ ຫລື ສອງມື້ຕໍ່ໄປ. ໃຫ້ເອົາບັດເຫລົ່ານີ້ໃຫ້ຜູ້ສົນໃຈ ເພື່ອສົ່ງຕໍ່ໃຫ້ໝູ່ເພື່ອນ ແລະ ຍາດພີ່ນ້ອງຂອງເຂົາ. ມັນກໍເປັນຄວາມຄິດທີ່ດີ ທີ່ຈະຖືໃບສືບປະຫວັດສີ່ລຸ້ນຄົນຂອງຄອບຄົວທ່ານໄປນຳເປັນຕົວຢ່າງ ແລະ ແບ່ງປັນຂໍ້ມູນກັບຜູ້ທີ່ມີນາມສະກຸນດຽວກັນກັບທ່ານ.

ໝາຍເຫດ

ກ່ອນຈະເລີ່ມຕົ້ນ, ໃຫ້ພິຈາລະນາເຮັດສິ່ງດັ່ງຕໍ່ໄປນີ້:

- ໃຫ້ໄປຢ້ຽມຢາມສູນປະຫວັດຄອບຄົວ ຖ້າຫາກມັນມີຢູ່ໃນເຂດຂອງທ່ານ.
- ໃຫ້ສົນທະນາກັບອະທິການ ແລະ ສະພາຫວອດ ເຖິງຄວາມປາດຖະໜາຂອງທ່ານທີ່ຢາກໃຫ້ຄວາມຊ່ອຍເຫລືອກ່ຽວກັບປະຫວັດຄອບຄົວກັບຜູ້ທີ່ທ່ານພົບ ແຕ່ລະມື້.
- ໃຫ້ສົນທະນາກັບຜູ້ນຳຂອງຫວອດເຖິງວິທີທີ່ຈະປະສານວຽກງານນີ້:
  - ອະທິການສະບາຍໃຈກັບການມອບຄວາມຊ່ອຍເຫລືອຂອງທ່ານໃຫ້ສະມາຊິກຂອງຫວອດບໍ?
  - ມີສະມາຊິກຫວອດຄົນໃດທີ່ຮັບໃຊ້ຢູ່ໃນສູນປະຫວັດຄອບຄົວ ຫລື ມີໃຜບໍ່ທີ່ຊ່ຽວຊານໃນວຽກງານປະຫວັດຄອບຄົວ?
  - ທ່ານຈະສາມາດຂໍຄວາມຊ່ອຍເຫລືອຈາກສະມາຊິກເຫລົ່ານີ້ໄດ້ດີທີ່ສຸດໃນວິທີໃດ?
  - ໃຜຈະສາມາດໄປກັບທ່ານໄດ້ ເມື່ອທ່ານເອົາໃບສືບລຳດັບເຊື້ອສາຍ ຫລື ບັນທຶກຄອບຄົວໄປສິ່ງ?

ໃຫ້ອ່ານເລື່ອງດັ່ງຕໍ່ໄປນີ້ ທີ່ຜູ້ສອນສາດສະໜາອະວຸໂສຄົນໜຶ່ງໄດ້ເລົ່າ. ໃຫ້ສັງເກດເບິ່ງບົດບາດທີ່ປະຫວັດຄອບຄົວໄດ້ມີສ່ວນ ໃນການປ່ຽນໃຈເຫລື້ອມໃສຂອງຜົວເມຍຄູ່ນີ້.

*ມຽວດາເລັດ ໂຊດ ເປັນສະມາຊິກທີ່ເຂັ້ມແຂງໃນສາດສະໜາຂອງນາງ. ມັນບໍ່ແມ່ນເລື່ອງປະຫລາດໃຈທີ່ນາງໄດ້ເຊີນໃຫ້ຜູ້ສອນສາດສະໜາເຂົ້າໄປໃນບ້ານຂອງນາງ ເພື່ອນາງຈະໄດ້ສອນເຂົາເຈົ້າເຖິງ "ຄວາມຈິງ" ເມື່ອຜູ້ສອນສາດສະໜາໄປເຄາະປະຕູບ້ານນາງ. ໃນຂະນະທີ່ຜູ້ສອນສາດສະໜາສອນ, ນາງຮູ້ສຶກຊາບຊຶ້ງໃນຄວາມຈິງຂອງພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່ ແລ້ວນາງໄດ້ຮັບບັບຕິດສະມາ. ໃນລະຍະການສອນ, ສາມີຂອງນາງ ຊື່ ຟາແລງ ບໍ່ໄດ້ຢູ່ຟັງ.*

*ໃນຊ່ວງນີ້ແຫລະທີ່ຂ້າພະເຈົ້າໄດ້ເຂົ້າມາກ່ຽວຂ້ອງ. ພວກແອວເດີໄດ້ແນະນຳໃຫ້ພວກເຮົາຮູ້ຈັກຊິດສະເຕີ ໂຊດ. ພວກເຮົາໄດ້ຊ່ອຍນາງເລີ່ມຄົ້ນຄວ້າຫາເຊື້ອສາຍຂອງນາງ ແລະ ໄດ້ເຊີນນາງໃຫ້ໄປພົບກັບພວກເຮົາຢູ່ສູນປະຫວັດຄອບຄົວ. ມື້ນັດຂອງພວກເຮົາໄດ້ມາເຖິງ, ແລະ ຟາແລງໄດ້ຂໍມານຳ ເພື່ອລາວຈະສາມາດຄົ້ນຄວ້າຫາບັນພະບຸລຸດຂອງລາວ. ແນ່ນອນ ມຽວດາເລັດ ກໍດີໃຈຫລາຍກ່ຽວກັບເລື່ອງນັ້ນ, ແລະ ໄດ້ພາກັນໄປຫາສູນປະຫວັດຄອບຄົວ.*

*ພວກແອວເດີໄດ້ວາງແຜນຈະພົບພວກເຮົາຢູ່ບ່ອນນັ້ນໃນຕອນບ່າຍມື້ນັ້ນ. ກ່ອນຜູ້ສອນສາດສະໜາໄປເຖິງ ພວກເຮົາໄດ້ພາ ມຽວດາເລັດ ແລະ ຟາແລງ ໄປຫ້ອງສະໝຸດ ແລະ ໄດ້ແນະນຳໃຫ້ເຂົາເຈົ້າຮູ້ຈັກ ຊິດສະເຕີ ວະໄລ. ຊິດສະເຕີ ວະໄລ ໄດ້ເປັນຜູ້ຊ່ຽວຊານທາງປະຫວັດຄອບຄົວ, ແລະ ນາງໄດ້ສະໝັກຊ່ອຍຊອກຫາ ຂໍ້ມູນທີ່ກ່ຽວກັບພໍ່ຂອງຟາແລງ. ນາງໄດ້ຊອກເຫັນຊື່ຢູ່ໃນປຶ້ມ ແລະ ໄດ້ສະແດງແຜນທີ່ຂອງປະເທດເຢຍລະມັນ ໃຫ້ຟາແລງເຫັນບ່ອນເກີດຂອງພໍ່ລາວ. ຟາແລງມີຄວາມຕື່ນເຕັ້ນຫລາຍຍ້ອນການຄົ້ນເຫັນເຫລົ່ານີ້ ແລ້ວເມື່ອພວກແອວເດີມາເຖິງ, ລາວໄດ້ເຊີນເຂົາເຈົ້າໃຫ້ໄປກິນເຂົ້າຢູ່ບ້ານລາວ ແລະ ລາວໄດ້ເອົາຮູບມາໃຫ້ເຂົາເຈົ້າເບິ່ງ ແລະ ເລົ່າປະຫວັດຄອບຄົວຂອງລາວໃຫ້ເຂົາເຈົ້າຟັງ. ວິນຍານຂອງເອລີຢາໄດ້ເຮັດໃຫ້ລາວຮູ້ສຶກຊາບຊຶ້ງ ແລະ ໄດ້ເຮັດໃຫ້ຈິດໃຈຂອງລາວອ່ອນໂຍນ ແລະ ໄດ້ເປີດປະຕູໃຫ້ພະກິດຕິຄຸນທີ່ເຮັດໃຫ້ຊີວິດຂອງລາວເຕັມສ່ວນ.*

*ໃນຄືນນັ້ນ, ມຽວດາເລັດ ໄດ້ຄິດກ່ຽວກັບສິ່ງທີ່ນາງຄວນເວົ້າ ເພື່ອຊ່ອຍໃຫ້ຟາແລງສົນໃຈກັບພະກິດຕິຄຸນຫລາຍຂຶ້ນ ແລ້ວຄຳຖາມໄດ້ເຂົ້າໄປໃນໃຈຂອງນາງ. "ຟາແລງ," ນາງໄດ້ເລີ່ມເວົ້າຂຶ້ນ, "ເຈົ້າຢາກຢູ່ນຳຂ້ອຍຕະຫລອດໄປ, ແມ່ນແຕ່ຫລັງຈາກຊີວິດນີ້ບໍ? ເຈົ້າຢາກມີຄອບຄົວນິລັນດອນບໍ?" ຟາແລງຕອບທັນທີວ່າ, "ໂອ້, ມຽວດາເລັດ ເອີຍ, ແນ່ນອນ, ຂ້ອຍຢາກມີ. ຂ້ອຍຈະເຮັດໄດ້ແນວໃດ?" ຄຳຖາມນີ້ແຫລະທີ່ນາງໄດ້ອະທິຖານຂໍມານານແລ້ວ. ນາງໄດ້ຕອບວ່າ, "ໃຫ້ຟັງຄຳຂອງຜູ້ສອນສາດສະໜາ." ຟາແລງໄດ້ຕົກລົງ. ໃນຂະນະທີ່ຜູ້ສອນສາດສະໜາໄດ້ສອນ, ຄວາມອົບອຸ່ນຂອງຂ່າວສານການຟື້ນຟູໄດ້ເຮັດໃຫ້ຄວາມສົງໃສ ແລະ ຄວາມຢ້ານກົວຂອງລາວຫາຍໄປ ລາວໄດ້ຍອມຮັບເອົາຄວາມຈິງທີ່ຜູ້ສອນສາດສະໜາໄດ້ແບ່ງປັນໃນທັນທີ. ລາວໄດ້ຍອມຮັບເອົາການເຊື້ອເຊີນໃຫ້ຮັບບັບຕິດສະມາ. ຟາແລງ ແລະ ມຽວດາເລັດ ໄດ້ເປັນສະມາຊິກທີ່ເຂັ້ມແຂງຂອງສາດສະໜາຈັກ ແຕ່ນັ້ນມາ.*

*ຟາແລງ ແລະ ມຽວດາເລັດ ໄດ້ເອົາໃຈໃສ່ເພື່ອເຮັດວຽກງານປະຫວັດຄອບຄົວໃຫ້ສຳເລັດ ເພື່ອພິທີການແຫ່ງຄວາມລອດຈະໄດ້ຖືກກະທຳເພື່ອຄອບຄົວຂອງລາວ. ມັນເປັນມື້ທີ່ຕື່ນເຕັ້ນເມື່ອເຂົາເຈົ້າໄດ້ຮັບບັບຕິດສະມາແທນສະມາຊິກໃນຄອບຄົວຂອງເຂົາເຈົ້າ. ໃນຊ່ວງທີ່ພະຍາຍາມໃຫ້ວຽກງານທາງພະວິຫານສຳເລັດ, ບະລາເດີ ໂຊດ ໄດ້ຝັນເຫັນພໍ່ຂອງລາວ. ລາວໄດ້ເຫັນພໍ່ຂອງລາວຢູ່ເຮືອນບ່ອນທີ່ລາວຢູ່ຕອນລາວຍັງນ້ອຍ. ພໍ່ຂອງລາວໄດ້ຢືນຢູ່ຂ້າງຕັ່ງໄຫວຢູ່ໜ້າປະຕູເຮືອນ, ໃສ່ເສື້ອຜ້າສີຂາວ ແລະ ໄດ້ຍື່ນມືອອກມາຫາລູກຊາຍ. ຟາແລງໄດ້ສະດຸ້ງຕື່ນດ້ວຍຄວາມຮ້ອງໄຫ້. ລາວຮູ້ວ່າ ພໍ່ຂອງລາວໄດ້ຍອມຮັບເອົາວຽກທີ່ເຂົາເຈົ້າໄດ້ເຮັດເພື່ອລາວແລ້ວ.*

ໝາຍເຫດ

### ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ

- ແມ່ນຫຍັງເຮັດໃຫ້ຟາແລງ ຕັດສິນໃຈໃຫ້ຜູ້ສອນສາດສະໜາສອນລາວ?
- ທ່ານຈະເອົາປະຫວັດຄອບຄົວມາກ່ຽວພັນກັບແຜນການຂອງພະເຈົ້າສຳລັບຄອບຄົວໄດ້ໃນວິທີໃດ?
- ທ່ານໃຊ້ປະຫວັດຄອບຄົວໃຫ້ເປັນເຄື່ອງມືໃນການຊອກຫາໃນວິທີໃດ? ທ່ານຈະສາມາດບອກລາຍລະອຽດກ່ຽວກັບປະຫວັດຄອບຄົວ ແກ່ຜູ້ຄົນທີ່ທ່ານພົບແຕ່ລະມື້ໄດ້ໃນທາງໃດແດ່? ໃຫ້ວາງແຜນເລີ່ມໃຊ້ປະຫວັດຄອບຄົວໃຫ້ເປັນເຄື່ອງມືທີ່ສຳຄັນໃນການຊອກຫາຄົນເພື່ອສອນ.

ປະຫວັດຄອບຄົວເປັນແຫລ່ງທີ່ມີພະລັງໃນການໃຊ້ຊອກຫາຜູ້ຄົນທີ່ພະຜູ້ເປັນເຈົ້າກຳລັງຕຽມໄວ້ ເພື່ອຮັບເອົາພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່. ໃຫ້ອະທິຖານເພື່ອຈະໄດ້ຮູ້ເຖິງໂອກາດທີ່ຈະໃຊ້ປະຫວັດຄອບຄົວໃນວຽກງານການຊອກຫາຂອງທ່ານ. ຕາມທຳມະດາແລ້ວ ຜູ້ຄົນຈະມີຄວາມຮູ້ສຶກທາງວິນຍານເມື່ອເຂົາເຈົ້າເວົ້າເຖິງຄອບຄົວ. ຜູ້ຄົນຈະຮູ້ສຶກເຖິງພະວິນຍານນຳອີກ ເມື່ອເຂົາເຈົ້າໄດ້ຮຽນຮູ້ກ່ຽວກັບຄຳສອນ ທີ່ກ່ຽວກັບວ່າ ເປັນຫຍັງເຮົາຈຶ່ງເຮັດວຽກງານທາງປະຫວັດຄອບຄົວ. ນອກເໜືອໄປກວ່ານີ້, ການຮັກສາຜູ້ປ່ຽນໃຈເຫລື້ອມໃສໄວ້ ຈະດີຂຶ້ນເມື່ອສະມາຊິກໃໝ່ສາມາດຄົ້ນຄວ້າຫາເຊື້ອສາຍຂອງເຂົາ ແລະ ດຳເນີນພິທີການທີ່ສັກສິດແທນບັນພະບຸລຸດຂອງເຂົາ.

### ການສຶກສາພະຄຳພີ

**ພະຜູ້ເປັນເຈົ້າໄດ້ຟື້ນຟູຫຍັງແດ່ຜ່ານທາງເອລີຢາ?**

D&C 110:14–16 | D&C 138:32–34 | ມາລາກີ 4:5–6

D&C 128:16–18

### ກິດຈະກຳ: ການສຶກສາສ່ວນຕົວ ແລະ ການສຶກສາກັບຄູ່ສອນສາດສະໜາ

ໃຫ້ວາງແຜນໄປຢ້ຽມຢາມສູນປະຫວັດຄອບຄົວໃນທ້ອງຖິ່ນກັບສະມາຊິກທີ່ມີຄວາມຊ່ຽວຊານເລື່ອງປະຫວັດຄອບຄົວ ເມື່ອທ່ານໄປເລາະເບິ່ງ, ໃຫ້ສອບຖາມກ່ຽວກັບການຮັບໃຊ້ທີ່ມີຢູ່. ໃຫ້ຊອກຫາລາຍລະອຽດອື່ນໆ, ເຊັ່ນ ເວລາທີ່ສູນນັ້ນເປີດ, ໃຜຮັບໃຊ້ຢູ່ສູນນັ້ນ, ແລະ ມີຫຍັງແດ່ທີ່ຈະມອບໃຫ້ຜູ້ທີ່ທ່ານຕິດຕໍ່ແຕ່ລະມື້ໄດ້.

ໃຫ້ຝຶກວິທີທີ່ທ່ານຈະມອບຄວາມຊ່ອຍເຫລືອທາງປະຫວັດຄອບຄົວໃຫ້ຜູ້ທີ່ທ່ານພົບເຫັນ. ໃຫ້ວາງແຜນທີ່ຈະບອກກ່ຽວກັບວຽກງານທາງປະຫວັດຄອບຄົວໃນການຊອກຫາຂອງທ່ານ.

---

ໃຫ້ອ່ານ ແລະ ສົນທະນາ “Family History Work and Genealogy” ໃນ *True to the Faith* ເພື່ອຈະມີຄວາມເຂົ້າໃຈວຽກງານທາງປະຫວັດຄອບຄົວໃຫ້ຫລາຍຂຶ້ນກວ່າເກົ່າ. ໃຫ້ຂຽນສິ່ງທີ່ທ່ານໄດ້ຮຽນຮູ້ໄວ້ໃນປຶ້ມສຶກສາຂອງທ່ານ.

## ຜູ້ສົນໃຈເກົ່າ

ຜູ້ສົນໃຈເກົ່າເປັນແຫລ່ງທີ່ສຳຄັນຫລາຍຂອງການຊອກຫາຄົນເພື່ອສອນ. ມັນກໍມີຫລາຍເຫດຜົນທີ່ຄົນໄດ້ເຊົາສົນໃຈສາດສະໜາຈັກ. ເຫດຜົນບາງຢ່າງແມ່ນຮ່ວມທັງຜູ້ສອນສາດສະໜາໄດ້ຍ້າຍໄປບ່ອນອື່ນ, ຜູ້ສົນໃຈໄປພັກທ່ອງທ່ຽວ, ຜູ້ສອນສາດສະໜາເຊົາໄປຢ້ຽມຢາມເຖິງແມ່ນວ່າຜູ້ສົນໃຈຍັງຫວັງຢາກໃຫ້ເຂົາເຈົ້າໄປຢ້ຽມຢາມຢູ່, ແລະ ຜູ້ສົນໃຈເຊື່ອວ່າ ຜູ້ສອນສາດສະໜາບໍ່ມີຫຍັງໃໝ່ມາສອນເຂົາອີກ. ຜູ້ສົນໃຈເກົ່າຫລາຍຄົນຈະເວົ້າວ່າ ເຂົາຍິນດີທີ່ຈະພົບກັບຜູ້ສອນສາດສະໜາອີກ.

ໃຫ້ທົບທວນປຶ້ມບັນທຶກປະຈຳເຂດຂອງທ່ານເລື້ອຍໆ ເພື່ອຊອກຫາຜູ້ສົນໃຈເກົ່າ. ດ້ວຍການອະທິຖານ ໃຫ້ໄຕ່ຕອງເຖິງຂໍ້ມູນໃນປຶ້ມບັນທຶກນັ້ນກ່ຽວກັບວິທີທີ່ຜູ້ສົນໃຈໄດ້ມາຮູ້ຈັກກັບສາດສະໜາຈັກ, ເຂົາໄດ້ຖືກສິດສອນ



© 1990 Del Parson ຫ້າມລອກແບບ.

ໝາຍເຫດ

ຫຍັງແລ້ວ, ເຂົາໄດ້ຕອບແນວໃດ, ແລະ ເປັນຫຍັງເຂົາຈຶ່ງເຂົ້າຮຽນພະກິດຕິຄຸນ. ຖ້າຫາກສະມາຊິກໄດ້ກ່ຽວຂ້ອງໃນການສອນ ແລະ ໄດ້ຜູກມິດກັບຜູ້ສົນໃຈເກົ່າ, ໃຫ້ຖາມສະມາຊິກວ່າ ເຂົາເຈົ້າຈື່ຫຍັງໄດ້ແດ່ກ່ຽວກັບປະສົບການນັ້ນ. ອີງຕາມຂໍ້ມູນນີ້, ໃຫ້ວາງແຜນຕິດຕໍ່ຜູ້ສົນໃຈອີກ.

ຖ້າຫາກຜູ້ໃດທີ່ທ່ານກຳລັງສອນຢູ່ຕອນນີ້ ເລີອກເຂົ້າຮຽນພະກິດຕິຄຸນ, ໃຫ້ບັນທຶກຂໍ້ມູນທີ່ຈະຊ່ອຍຜູ້ສອນສາດສະໜາ ທີ່ຈະຕິດຕໍ່ຫາເຂົາເຈົ້າໃນອະນາຄົດ ໄວ້ໃນປຶ້ມບັນທຶກປະຈຳເຂດ.

ເມື່ອທ່ານອ່ານປະສົບການດັ່ງຕໍ່ໄປນີ້, ໃຫ້ພິຈາລະນາເຖິງພະລັງຂອງການຕິດຕໍ່ຜູ້ສົນໃຈເກົ່າ.

*ຂ້າພະເຈົ້າປະຫລາດໃຈທີ່ຖືກເອີ້ນໃຫ້ໄປຮັບໃຊ້ເຜີຍແຜ່ຢູ່ບ່ອນດຽວກັນກັບບ່ອນທີ່ເອື້ອຍຂອງຂ້າພະເຈົ້າໄດ້ຮັບໃຊ້ ໃນໜຶ່ງປີກ່ອນ. ຫລັງຈາກໄດ້ຢູ່ໃນສະໜາມເຜີຍແຜ່ ສາມເດືອນ, ຂ້າພະເຈົ້າໄດ້ຍ້າຍໄປເຂດໜຶ່ງທີ່ເອື້ອຍຂອງຂ້າພະເຈົ້າ ເຄີຍຮັບໃຊ້. ເມື່ອຮູ້ວ່າ ຂ້າພະເຈົ້າໄດ້ຍ້າຍໄປບ່ອນນັ້ນ, ເອື້ອຍຂ້າພະເຈົ້າໄດ້ຂຽນຈົດໝາຍຫາຂ້າພະເຈົ້າ ແລະ ໄດ້ຂໍໃຫ້ ຂ້າພະເຈົ້າໄປຢ້ຽມຢາມຄອບຄົວໜຶ່ງທີ່ລາວ ແລະ ຄູ່ສອນສາດສະໜາຂອງລາວໄດ້ສອນ. ລາວໄດ້ບອກເຖິງຄວາມຮັກ ແລະ ຄວາມໃກ້ຊິດທີ່ລາວມີຕໍ່ຄອບຄົວ ໂນແມນ ແລະ ຮູ້ສຶກເສຍໃຈທີ່ເຂົາເຈົ້າໄດ້ເຊົາສົນໃຈສາດສະໜາຈັກ.*

*ຄູ່ສອນສາດສະໜາ ແລະ ຂ້າພະເຈົ້າໄດ້ຫາເຫັນຄອບຄົວ ໂນແມນ ແລະ ເຂົາເຈົ້າໄດ້ຕ້ອນຮັບພວກເຮົາເປັນຢ່າງດີ. ເຂົາເຈົ້າໄດ້ຍອມຮັບການເຊື້ອເຊີນໃຫ້ຟັງພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ອີກ. ຂ້າພະເຈົ້າບໍ່ຮູ້ວ່າມີຫຍັງແຕກຕ່າງເທື່ອນີ້, ແຕ່ເຂົາເຈົ້າໄດ້ຕຽມພ້ອມທີ່ຈະຮັບເອົາຂ່າວສານຂອງພວກເຮົາ. ທຸກຄົນໃນຄອບຄົວໄດ້ຮັບບັບຕິສະມາ ແລະ ຮັບການ ຢືນຢັນ.*

*ຫລັງຈາກປະສົບການນີ້, ຂ້າພະເຈົ້າໄດ້ຄິດເຖິງຜູ້ສົນໃຈເກົ່າຄົນອື່ນໆທີ່ເອື້ອຍຂ້າພະເຈົ້າໄດ້ສອນ. ຂ້າພະເຈົ້າໄດ້ ຄິດວ່າ, "ຖ້າຫາກວ່າມັນເປັນໄປໄດ້ກັບຄອບຄົວໂນແມນ, ບາງທີມັນອາດຈະໄປໄດ້ກັບຄົນອື່ນໆ ທີ່ເອື້ອຍຂ້າພະເຈົ້າ ເຄີຍສອນກໍໄດ້." ຂ້າພະເຈົ້າຕັດສິນໃຈຂຽນຈົດໝາຍຫາເອື້ອຍກ່ຽວກັບຄວາມຄິດ ທີ່ຈະຕິດຕໍ່ຫາຄົນອື່ນໆທີ່ລາວ ເຄີຍສອນ. ລາວໄດ້ຄົ້ນຄວ້າບັນທຶກສ່ວນຕົວຂອງລາວ ແລ້ວໄດ້ສົ່ງຊື່ຂອງຜູ້ສົນໃຈເກົ່າໃນເຂດນັ້ນ ມາໃຫ້ຂ້າພະເຈົ້າ.*

*ຄູ່ສອນສາດສະໜາຂອງຂ້າພະເຈົ້າ ແລະ ຂ້າພະເຈົ້າໄດ້ໃຊ້ອາທິດຕໍ່ໄປນັ້ນ ເພື່ອຕິດຕໍ່ຫາຜູ້ຄົນເຫລົ່ານີ້. ພວກເຮົາ ດີໃຈເພາະວ່າ ເກືອບເຄິ່ງໜຶ່ງໃນຈຳນວນຄົນເຫລົ່ານັ້ນໄດ້ຍອມຮັບການເຊື້ອເຊີນທີ່ຈະຟັງພະກິດຕິຄຸນທີ່ຟື້ນຟູຄືນມາ ໃໝ່ອີກ. ຫລາຍຄົນໃນກຸ່ມນີ້ໄດ້ຮັບບັບຕິສະມາ ແລະ ຮັບການຢືນຢັນ. ໃນຂະນະທີ່ສອນຜູ້ສົນໃຈເກົ່າເຫລົ່ານີ້, ພວກເຮົາໄດ້ຂໍໃຫ້ເຂົາເຈົ້າແນະນຳຊື່ຂອງໝູ່ເພື່ອນ ແລະ ຄົນທີ່ເຂົາເຈົ້າຮູ້ວ່າອາດຈະສົນໃຈຂ່າວສານຂອງພວກເຮົາ. ຍ້ອນສິ່ງນີ້, ພວກເຮົາຈຶ່ງໄດ້ພົບເຫັນຄົນອື່ນຕື່ມອີກເພື່ອສອນ. ນີ້ເປັນເວລາທີ່ມີວຽກເຮັດຫລາຍທີ່ສຸດໃນເວລາເຜີຍແຜ່ ຂອງຂ້າພະເຈົ້າ.*

**ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ**

- ໃຫ້ຊອກຫາຜູ້ສົນໃຈເກົ່າທັງໝົດໃນປຶ້ມບັນທຶກປະຈຳເຂດຂອງທ່ານ.
- ໃຫ້ວາງແຜນຕິດຕໍ່ຫາເຂົາເຈົ້າ ໃຫ້ຫລາຍເທົ່າທີ່ຈະເປັນໄປໄດ້ ພາຍໃນ 24 ຊົ່ວໂມງຂ້າງໜ້າ.

## ການຊອກຫາຜ່ານຄວາມພະຍາຍາມຂອງທ່ານເອງ

ໃຫ້ສະແຫວງເຮັດໃຫ້ສັດທາຂອງທ່ານເຂັ້ມແຂງຂຶ້ນ ວ່າພະເຈົ້າໄດ້ຕຽມລູກໆຂອງພະອົງ ເພື່ອຮັບເອົາຂ່າວສານຂອງ ການຟື້ນຟູ. ເມື່ອທ່ານເຮັດຈົນສຸດຄວາມສາມາດພາຍໃຕ້ການນຳພາຂອງພະວິນຍານບໍລິສຸດທີ່ຈະຊອກຫາຄົນເພື່ອສອນ, ແລ້ວພະຜູ້ເປັນເຈົ້າຈະເອົາຜູ້ຄົນເຫລົ່ານັ້ນມາວາງໄວ້ໃນເສັ້ນທາງຂອງທ່ານ.

ມັນມີຫລາຍວິທີທາງທີ່ສັດຊື່ເພື່ອຊອກຫາຄົນທີ່ໄດ້ຕຽມໄວ້ສຳລັບພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່. ທ່ານຕ້ອງເຮັດຈົນສຸດ ຄວາມສາມາດທີ່ຈະຖືກສົ່ງໄປໃນທາງຂອງຜູ້ຄົນທີ່ກຳລັງຖືກຕຽມໄວ້. ຜູ້ສອນສາດສະໜາໄດ້ພົບເຫັນວ່າ ແນວຄິດດັ່ງຕໍ່ໄປ ນີ້ໄດ້ຊ່ອຍເຂົາເຈົ້າໃຫ້ພົບເຫັນຄົນເພື່ອຈະສອນ ຜ່ານຄວາມພະຍາຍາມຂອງເຂົາເຈົ້າເອງ. ເມື່ອທ່ານທົບທວນລາຍການນີ້, ໃຫ້ວາງແຜນລອງໃຊ້ແນວຄິດບາງຢ່າງທີ່ໃໝ່ສຳລັບທ່ານ. ລາຍການນີ້ກໍເປັນຈຸດເລີ່ມຕົ້ນສຳລັບທ່ານໃນການນຶກຄິດເຖິງ ວິທີທາງອື່ນທີ່ສັດຊື່ເພື່ອຊອກຫາຄົນເພື່ອສອນ.

ໝາຍເຫດ



- ໃຫ້ຮ່ວມມືກັບອະທິການ ແລະ ສະພາຫວອດ ເພື່ອຊອກຫາ ແລະ ຕິດຕໍ່ຄົນທີ່ຫາກໍໄດ້ລູກໃໝ່, ທີ່ໄດ້ຍ້າຍມາຢູ່ເຂດນີ້ໃໝ່, ຫລື ຜູ້ທີ່ໄດ້ປະສົບການຕາຍໃນຄອບຄົວ.
- ໃຫ້ຊອກຫາໂອກາດທີ່ຈະໃຫ້ການຮັບໃຊ້ເລັກນ້ອຍ.
- ໃຫ້ສອນສະມາຊິກ—ພ້ອມທັງຜູ້ທີ່ເຂັ້ມແຂງ ແລະ ບໍ່ເຂັ້ມແຂງ, ສະມາຊິກໃໝ່, ແລະ ຄອບຄົວທີ່ບໍ່ໄດ້ເປັນສະມາຊິກທັງໝົດ—ເຖິງຂ່າວສານຂອງການຟື້ນຟູ. ຂໍໃຫ້ເຂົາເຈົ້າແນະນຳທ່ານໃຫ້ຮູ້ຈັກກັບຄົນທີ່ທ່ານຈະສາມາດສອນ.
- ໃຫ້ຈັດການປະຊຸມຝາຍເອີຊາຍໃນບ້ານຂອງສະມາຊິກບ່ອນທີ່ເຂົາເຈົ້າຈະສາມາດຊວນໝູ່ເພື່ອນຂອງເຂົາມາຮ່ວມ ຫລື ບ່ອນທີ່ທ່ານຈະສາມາດສອນພະກິດຕິຄຸນ ແລະ ຂໍລາຍຊື່ຜູ້ຖືກແນະນຳ.
- ໃຫ້ສະໝັກສອນຄົນເຖິງວິທີທີ່ຈະຈັດການສັງສັນໃນຄອບຄົວ.
- ໃຫ້ສະໝັກພາຄົນທີ່ທ່ານພົບເຫັນໄປທ່ຽວຊົມໂບດໃນທ້ອງຖິ່ນ.
- ໃຫ້ສະໝັກຈັດການນັດພົບກັບອະທິການ.
- ໃຫ້ເຊື້ອເຊີນຜູ້ຄົນເປີດເບິ່ງ www.mormon.org
- ໃຫ້ຈັດຫ້ອງສຶກສາພະຄຳພີ.
- ໃຫ້ສອນພາສາອັງກິດທີ່ເປັນພາສາທີສອງ.
- ໃຫ້ເຊື້ອເຊີນຄົນທີ່ມີອາຍຸເໝາະສົມເອົາຫ້ອງສາດສະໜາ ຫລື ໄປຮຽນຢູ່ສະຖາບັນ.
- ໃຫ້ໄປຫາເຮືອນແຕ່ລະຫລັງ ຫລື ລົມນຳຄົນຕາມຖະໜົນຫົນທາງ.
- ໃຫ້ໃຊ້ບັດນ້ອຍສິ່ງຕໍ່, ດີວີດີ, ໜັງ, ແລະ ໃບໂຄສະນາ.
- ໃຫ້ຂໍຊື່ຄົນຈາກຜູ້ສົນໃຈໃນປະຈຸບັນ, ຜູ້ສົນໃຈເກົ່າ, ສະມາຊິກທີ່ບໍ່ເຂັ້ມແຂງ, ຜູ້ຈະເປັນແອວເດີ, ແລະ ຈາກທຸກໆຄົນທີ່ທ່ານພົບເຫັນ.
- ໃຫ້ຮ່ວມມືຢ່າງໃກ້ຊິດກັບຜູ້ແທນຝ່າຍສື່ສານມວນຊົນຂອງສາດສະໜາຈັກ ເພື່ອຫາໂອກາດພິມເລື່ອງສັ້ນໆໃນໜັງສືພິມທ້ອງຖິ່ນກ່ຽວກັບການຮັບໃຊ້ຂອງຜູ້ສອນສາດສະໜາ.
- ໃຫ້ເຊື້ອເຊີນຄົນໄປຮ່ວມກອງປະຊຸມໂບດ, ກິດຈະກຳຕ່າງໆ, ແລະ ກອງປະຊຸມຮັບຕ້ອນ.
- ເຊື້ອເຊີນຜູ້ຄົນໃຫ້ໄປຮ່ວມພິທີບັບຕິສະມາ. ໂອກາດນີ້ຈະເປັນການແນະນຳໃຫ້ຜູ້ຄົນມາຮູ້ຈັກກັບສາດສະໜາຈັກ ແລະ ເປັນໂອກາດດີເພື່ອໃຫ້ຜູ້ສົນໃຈຮູ້ສຶກເຖິງອິດທິພົນຂອງພະວິນຍານບໍລິສຸດ.

## ໄປທຸກຫົນທຸກແຫ່ງເຮັດຄຸນງາມຄວາມດີ

ສັດທາຂອງທ່ານໃນການຊອກຫາຄົນເພື່ອສອນແມ່ນສະແດງອອກຜ່ານການກະທຳຂອງທ່ານ. ໃນລະຫວ່າງພາລະກິດແຫ່ງມະຕະຂອງພະອົງ, ພະຜູ້ຊ່ອຍໃຫ້ລອດໄດ້ "ຮັບເອົາສະພາບຂອງຜູ້ຮັບໃຊ້" (ຟີລິບປີ 2:7). ພະອົງໄດ້ສະເດັດໄປທຸກຫົນທຸກແຫ່ງ "ເຮັດຄຸນງາມຄວາມດີ" (ກິດຈະການ 10:38) ແລະ "ປະກາດຂ່າວປະເສີດ" (ມັດທາຍ 4:23). ເມື່ອທ່ານເຮັດຕາມຕົວຢ່າງນີ້, ທ່ານຈະພົບຜູ້ທີ່ຈະຮັບເອົາທ່ານ.

ຜ່ານການຮັບໃຊ້, ທ່ານ ແລະ ຄົນທີ່ໄດ້ຕຽມໄວ້ສຳລັບພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ ຈະພົບກັນໃນທາງທີ່ມີພະລັງ ແລະ ດົນໃຈ. ຄຸນງາມຄວາມດີຂອງທ່ານ ຈະຊ່ອຍຄົນໃຫ້ຮັບຮູ້ວ່າ ທ່ານເປັນຜູ້ຮັບໃຊ້ຂອງພະເຈົ້າ ແລະ ຈະນຳໄປຫາໂອກາດທີ່ຈະສອນພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່.

ໝາຍເຫດ



ປະສົບການຫລາຍຢ່າງທາງການຮັບໃຊ້ຂອງຜູ້ສອນສາດສະໜາກ່ອນເຂົາເຈົ້າມາເຜີຍແຜ່ແມ່ນກ່ຽວກັບ "ໂຄງການຮັບໃຊ້" ທີ່ຈັດໄວ້ແລ້ວ, ເຊັ່ນ ການຊ່ອຍເຫລືອຄົນຍ້າຍບ້ານ, ໄປເຮັດວຽກຢູ່ສວນຂອງສາດສະໜາຈັກ, ຫລືມ້ຽນເດີ່ນບ້ານ. ໃນເວລາເປັນຜູ້ສອນສາດສະໜາ, ທ່ານຈະສະໝັກໃຫ້ການຮັບໃຊ້ທີ່ຈັດໄວ້ແລ້ວເຊັ່ນດຽວກັນນັ້ນແຕ່ລະອາທິດ (ໃຫ້ເບິ່ງ *Missionary Handbook* ສຳລັບລາຍລະອຽດເພີ່ມເຕີມ).

ປະເພດການຮັບໃຊ້ທີ່ໄດ້ບັນຍາຍໄວ້ໃນພາກນີ້ແນໃສ່ໂອກາດທີ່ບໍ່ໄດ້ຈັດໄວ້ກ່ອນ. ການຮັບໃຊ້ປະເພດນີ້ກ່ຽວເຖິງການເຊື່ອຟັງພະວິນຍານບໍລິສຸດ ເພື່ອຈະໄດ້ຮູ້ໂອກາດທີ່ຈະເຮັດຄຸນງາມຄວາມດີອັນເລັກນ້ອຍທີ່ທ່ານສາມາດເຮັດໄດ້ແກ່ລູກໆຂອງພະເຈົ້າ. ໃຫ້ອະທິຖານ ແລະ ຮູ້ເຖິງໂອກາດທີ່ຈະເຮັດຄຸນງາມຄວາມດີຕະຫລອດທັງວັນ. ເມື່ອທ່ານສະແຫວງທີ່ຈະເຮັດຄຸນງາມຄວາມດີ, ທ່ານຈະຖືກນຳພາໄປຫາຄົນທີ່ຕຽມພ້ອມແລ້ວ ສຳລັບພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່.

ເມື່ອທ່ານອ່ານເລື່ອງລາວຕໍ່ໄປນີ້, ໃຫ້ພິຈາລະນາເບິ່ງວິທີທີ່ຜູ້ສອນສາດສະໜາໄດ້ "ເຮັດຄຸນງາມຄວາມດີ" ແລະ ໄດ້ສອນພະກິດຕິຄຸນແນວໃດ.

> "ທ່ານຢາກມີຄວາມສຸກບໍ? ໃຫ້ລືມຕົວເອງ ແລະ ຫລົງຢູ່ໃນການເຮັດວຽກງານທີ່ຍິ່ງໃຫຍ່ຂອງພະເຈົ້າ. ໃຫ້ເອົາກຳລັງຂອງທ່ານໄປຊ່ອຍຄົນອື່ນ. . . . ໃຫ້ພັດທະນາຕົນເອງ, ໃຫ້ຍົກຫົວເຂົ່າທີ່ອ່ອນແຮງ, ໃຫ້ຍົກມືທີ່ອ່ອນເພຍ. ໃຫ້ດຳລົງຊີວິດຕາມພະກິດຕິຄຸນຂອງພະເຢຊູຄຣິດ."
>
> – ປະທານ ກໍດອນ ບີ ຮິງລີ
>
> *TEACHINGS OF GORDON B. HINCKLEY*, 597

*ລຸງພັບ ໂລ ໄດ້ມາຫ້ອງຮຽນພາສາອັງກິດປະຈຳອາທິດຂອງພວກເຮົາເປັນປະຈຳ. ລາວໄດ້ກິນເງິນເບ້ຍບຳນານແລ້ວ ແລະ ໄດ້ມາຮຽນພາສາອັງກິດເພື່ອຊ່ອຍລາວບໍ່ໃຫ້ຄິດຫລາຍນຳເມຍຂອງລາວທີ່ປ່ວຍໂຊຢູ່. ແລ້ວໃນອາທິດໜຶ່ງລາວເຊົາມາຮຽນ. ບໍ່ມີໃຜຮູ້ວ່າເປັນຫຍັງ. ແລ້ວຫລັງຈາກເດືອນໜຶ່ງ, ລາວໄດ້ກັບຄືນມາຫ້ອງຮຽນອີກ. ເບິ່ງລາວຄືວ່າແຕກຕ່າງ. ລາວຈ່ອຍລົງ, ແລະ ເບິ່ງຄືວ່າອຸກໃຈຫລາຍ. ລາວບໍ່ໄດ້ເວົ້າຫຍັງໃນຫ້ອງຄືແຕ່ກ່ອນ, ແລະ ລາວອອກຈາກຫ້ອງກ່ອນພວກເຮົາໄດ້ເວົ້າລົມກັບລາວ.*

*ອາທິດຕໍ່ມາ, ຂ້າພະເຈົ້າ ແລະ ຄູ່ສອນສາດສະໜາໄດ້ພາກັນອະທິຖານຂໍໃຫ້ ລຸງພັບ ໂລ ກັບຄືນມາຫ້ອງຮຽນອີກເພື່ອພວກເຮົາຈະໄດ້ເວົ້າລົມນຳລາວ. ພວກເຮົາໄດ້ຮັບຄຳຕອບເພາະວ່າລາວໄດ້ກັບມາຫ້ອງຮຽນອາທິດຕໍ່ມາ. ໃນຂະນະທີ່ພວກເຮົາໄດ້ເວົ້າລົມກັບລາວຫລັງຈາກຫ້ອງຮຽນເລີກແລ້ວ, ລາວບອກວ່າ ເມຍລາວໄດ້ເສຍຊີວິດແລ້ວ. ລາວໄດ້ເລົ່າຕື່ມອີກໜ້ອຍໜຶ່ງກ່ຽວກັບປະສົບການໃຫ້ພວກເຮົາຟັງອີກ, ແລະ ພວກເຮົາໄດ້ສະແດງຄວາມເສຍໃຈນຳລາວ. ພວກເຮົາບອກລາວວ່າ ພວກເຮົາຢາກຊ່ອຍໃຫ້ລາວເຂົ້າໃຈວິທີທີ່ລາວຈະສາມາດຢູ່ກັບເມຍຂອງລາວໄດ້ອີກ. ລາວເງີຍໜ້າຂຶ້ນ, ຈ້ອງຕາຂ້າພະເຈົ້າ, ແລະ ໄດ້ເວົ້າດ້ວຍນ້ຳຕາແຫ່ງຄວາມໃຈຮ້າຍ ແລະ ໂສກເສົ້າວ່າ, "ຖ້າພວກເຈົ້າຢາກຊ່ອຍຂ້ອຍແທ້ໆ ໃຫ້ພວກເຈົ້າໄປບ້ານຂ້ອຍ ແລະ ຊ່ອຍຂ້ອຍຈັດຊີວິດໃຫ້ເປັນລະບຽບແມ້. ນີ້ບໍ່ແມ່ນສິ່ງທີ່ຜູ້ສອນສາດສະໜາເຮັດບໍ? ຂ້ອຍຕ້ອງການຄວາມຊ່ອຍເຫລືອທີ່ຈະຈັດບ້ານເຮືອນ ແລະ ຊີວິດຂອງຂ້ອຍໃຫ້ເປັນລະບຽບ."*

*ຄຳເວົ້າຂອງລຸງພັບ ໂລເຮັດໃຫ້ພວກເຮົາຕົກໃຈ ແລະ ຖ່ອມຕົນ. ພວກເຮົາໄດ້ສະເໜີໃຫ້ຄວາມຊ່ອຍເຫລືອຕາມທີ່ລາວຕ້ອງການໃນທຸກສິ່ງ. ຂ້າພະເຈົ້າຄິດວ່າໃນເວລານັ້ນແຫລະທີ່ລາວເລີ່ມໄວ້ວາງໃຈໃນຄວາມເຈດຕະນາຂອງພວກເຮົາ. ລາວບອກໃຫ້ພວກເຮົາໄປເຮືອນລາວເພື່ອຊ່ອຍລາວຕັດງ່າໄມ້ມື້ຕໍ່ມາ. ພວກເຮົາໄດ້ໄປບ້ານລາວຕາມນັດ ແລະ ໄດ້ເລີ່ມຕົ້ນເຮັດວຽກຄຽງຂ້າງລາວ. ໃນລະຍະທີ່ລາວໄດ້ດູແລເມຍຂອງລາວ, ລາວບໍ່ໄດ້ບົວລະບັດເດີ່ນບ້ານ ແລະ ເຮືອນຊານ. ມັນມີວຽກເຮັດຫລາຍສຳລັບພວກເຮົາທັງສາມ. ນີ້ເປັນການຮັບໃຊ້ປະຈຳອາທິດຢູ່ບ້ານລາວ. ພວກເຮົາຕັດງ່າໄມ້, ຫລົກຫຍ້າ, ແລະ ເກັບໝາກໄມ້. ພວກເຮົາບໍ່ໄດ້ເລີ່ມສອນຫຍັງ— ເມື່ອໃດພວກເຮົາເລີ່ມສອນ, ລາວຕັດຄວາມເວົ້າຂອງພວກເຮົາທັນທີ. ລາວສະບາຍໃຈເມື່ອພວກເຮົາລົມກັນເຖິງຊີວິດຂອງລາວ ແລະ ຄອບຄົວຂອງລາວ. ສ່ວນຫລາຍພວກເຮົາມີແຕ່ຟັງລາວເວົ້າ.*

ໝາຍເຫດ

*ຫລັງຈາກເດືອນເຄິ່ງ, ລຸງພັບ ໂລເຮັດໃຫ້ພວກເຮົາຕົກໃຈເມື່ອລາວຖາມວ່າ, "ຂ້ອຍຈະໄດ້ເຫັນເມຍຂອງຂ້ອຍແທ້ໆບໍ?" ດ້ວຍຄວາມດີໃຈ ພວກເຮົາຕອບລາວວ່າ ລາວຈະໄດ້ເຫັນແທ້ໆ. ພວກເຮົາໄດ້ກ່າວປະຈັກພະຍານເຖິງການເປັນຄອບຄົວນິລັນດອນ ແລະ ໄດ້ຕອບຄຳຖາມຂອງລາວຕາມທີ່ພວກເຮົາສາມາດ.*

*ພວກເຮົາໄດ້ສອນລຸງພັບ ໂລ ເຖິງແຜນແຫ່ງຄວາມລອດ. ຄຳສອນນີ້ເຮັດໃຫ້ລາວຮູ້ສຶກຊື່ນໃຈ. ກ່ອນພວກເຮົາກັບໄປລາວມີຄຳຖາມຫລາຍຄຳທີ່ລາວຕ້ອງການຄຳຕອບ, ເຊັ່ນ "ເມຍຂອງຂ້ອຍຈະມີຮ່າງກາຍບໍຕອນຂ້ອຍເຫັນລາວອີກ?" ແລະ "ພວກເຮົາຈະພົ້ນຈາກຄວາມເຈັບໄຂ້ໄດ້ປ່ວຍບໍ?" ພວກເຮົາໄດ້ຕອບຄຳຖາມຂອງລາວ ແລ້ວໄດ້ນັດໝາຍເວລາທີ່ຈະກັບມາສົນທະນາເລື່ອງຫລັກທຳຂອງພະກິດຕິຄຸນທີ່ໄດ້ຟື້ນຟູຄືນມາໃໝ່ຂອງພະເຍຊູຄຣິດ.*

*ຕໍ່ມາບໍ່ດົນ, ໃບໜ້າຂອງລຸງພັບ ໂລໄດ້ປ່ຽນໄປ, ລາວຍິ້ມເລື້ອຍໆຫລາຍກວ່າເກົ່າ ແລະ ເບິ່ງຄືວ່າມີຄວາມສະຫງົບສຸກຫລາຍກວ່າເກົ່າ. ລາວໄດ້ມີຄວາມຫວັງສຳລັບ ໂລກທີ່ດີກວ່ານີ້ (see Ether 12:4). ການຮັບໃຊ້ຂອງພວກເຮົາໄດ້ຊ່ອຍໃຫ້ລາວໄວ້ວາງໃຈໃນສິ່ງທີ່ພວກເຮົາສອນ.*

## ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ

- ຜູ້ສອນສາດສະໜາໃນເລື່ອງນີ້ໄດ້ເຮັດ "ຄຸນງາມຄວາມດີ" ໃນວິທີໃດ?
- ການຮັບໃຊ້ໄດ້ມີບົດບາດແນວໃດໃນການຕັດສິນໃຈຂອງລຸງພັບ ໂລ ທີ່ຈະຮັບການສິດສອນເລື່ອງພະກິດຕິຄຸນ?
- ທ່ານຊອກຫາໂອກາດທີ່ຈະເຮັດຄຸນງາມຄວາມດີແຕ່ລະມື້ບໍ? ທ່ານຈະສາມາດພັດທະນາ ໃນດ້ານນີ້ໄດ້ບໍ?

ໃຫ້ຂຽນໃສ່ປຶ້ມບັນທຶກການສຶກສາຂອງທ່ານ ຫລື ໃຫ້ສົນທະນາກັບຄູ່ສອນສາດສະໜາຂອງທ່ານເຖິງວິທີທີ່ທ່ານຈະສາມາດເຮັດຄຸນງາມຄວາມດີຕະຫລອດທັງວັນເພື່ອຊອກຫາຄົນເພື່ອສອນ.

ໃຫ້ເຊື່ອວ່າຄົນທີ່ກຳລັງຖືກຕຽມໄວ້ເພື່ອໃຫ້ຮັບເອົາຂ່າວສານຂອງການຟື້ນຟູ ຈະຖືກເອົາມາວາງໄວ້ຢູ່ໃນເສັ້ນທາງຂອງທ່ານ. ພະເຈົ້າຈະພາທ່ານໄປຫາບ່ອນທີ່ການກະທຳ ແລະ ຄຳເວົ້າຈາທີ່ດີຂອງທ່ານ ເປັນສິ່ງຕຽມຄົນໃຫ້ຍອມຮັບຜູ້ສອນສາດສະໜາ ແລະ ສະມາຊິກຂອງສາດສະໜາຈັກນຳອີກ. ໃນຄວາມພະຍາຍາມທັງໝົດຂອງທ່ານ, ໃຫ້ອະທິຖານ ແລະ ຊອກຫາໂອກາດທີ່ຈະຮັບໃຊ້, ຊ່ອຍເຫລືອ, ແລະ ຍົກຜູ້ອື່ນຂຶ້ນ. ໃນຂະນະທີ່ທ່ານຮັບໃຊ້ຢູ່ນັ້ນ, ໃຫ້ເວົ້າລົມກັບທຸກຄົນທີ່ທ່ານພົບເຫັນ. ໃຫ້ມີສັດທາວ່າ ທ່ານສາມາດແບ່ງປັນພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ໄດ້.



ໃນທຸກວິທີທາງທີ່ທ່ານຮັບໃຊ້, ທ່ານຄວນເຮັດໄປເພາະວ່າທ່ານຮັກອ້າຍເອື້ອຍນ້ອງຂອງທ່ານ ແລະ ສະນັ້ນ ໃຫ້ຫວັງ, ອະທິຖານ, ແລະ ມີຄວາມປາດຖະໜາຢ່າງຍິ່ງທີ່ຈະສອນພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ໃຫ້ເຂົາ.

## ຂໍ້ແນະນຳ

**ໃຫ້ຈື່ຈຳຂໍ້ແນະນຳດັ່ງຕໍ່ລົງໄປນີ້ເມື່ອທ່ານສະແຫວງທີ່ຈະເຮັດຄຸນງາມຄວາມດີ:**

- ຢູ່ກັບຄູ່ສອນສາດສະໜາຂອງທ່ານ.
- ຮັກສາສະພາບທີ່ສັກສິດຂອງການເອີ້ນຂອງທ່ານ.
- ຮັກສາກົດຂອງຜູ້ສອນສາດສະໜາ, ແລະ ຫ້າມບໍລິຈາກ ຫລື ໃຊ້ເງິນຂອງທ່ານ.
- ໃຫ້ເບິ່ງ *ຄູ່ມືສຳລັບຜູ້ສອນສາດສະໜາ* ສຳລັບຂໍ້ແນະນຳທີ່ກ່າວເຖິງການຮັບໃຊ້ຊຸມຊົນປະຈຳອາທິດ.

ໝາຍເຫດ

## ການສຶກສາພະຄຳພີ

**ບົດບາດຂອງການຮັບໃຊ້ຄືອັນໃດໃນຊີວິດຂອງພະຜູ້ຊ່ອຍໃຫ້ລອດ?**

3 ນີໄຟ 17:7, 21 | ມັດທາຍ 9:1–8 | ໂຢຮັນ 4:46–54
ມັດທາຍ 8:1–4 | ມາລະໂກ 1:21–28

**ບົດບາດຂອງການຮັບໃຊ້ຄືອັນໃດໃນການເຜີຍແຜ່ຂອງ ແອມັນ ແລະ ອາໂລນ?**

Alma 17:19–25 | Alma 18:8–10 | Alma 22:3

**ພະຜູ້ເປັນເຈົ້າໄດ້ຂໍໃຫ້ທ່ານເຮັດຫຍັງ?**

3 ນີໄຟ 27:21

## ບໍ່ມີຄວາມພະຍາຍາມໃດທີ່ເສຍໄປລ້າໆ

ເມື່ອຄົນເລືອກບໍ່ຮຽນເລື່ອງພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ອີກຕໍ່ໄປ, ວຽກງານຂອງທ່ານບໍ່ໄດ້ເສຍໄປລ້າໆ. ຄວາມພາກພຽນພະຍາຍາມໃນການຮັບໃຊ້ ແລະ ການສອນຫລາຍໆຄົນເທົ່າທີ່ທ່ານສາມາດເຮັດໄດ້ ເປັນທາງໜຶ່ງທີ່ພະເຈົ້າໄດ້ຕຽມລູກໆຂອງພະອົງໃຫ້ຍອມຮັບຜູ້ຮັບໃຊ້ຂອງພະອົງໃນທີ່ສຸດ. ສ່ວນຫລາຍແລ້ວພະອົງໄດ້ຕິດຕໍ່ຫາລູກໆຂອງພະອົງຜ່ານທາງທ່ານ. ເຖິງແມ່ນວ່າຄົນບໍ່ຍອມຮັບເອົາໂອກາດທີ່ຈະຮຽນຮູ້ພະກິດຕິຄຸນກໍຕາມ, ແຕ່ການຮັບໃຊ້ ແລະ ຄຳເວົ້າຂອງທ່ານໄດ້ເປັນຫລັກຖານເຖິງຄວາມຮັກທີ່ພະເຈົ້າມີຕໍ່ເຂົາເຈົ້າ ແລະ ອາດຈະປູກເມັດພືດໄວ້ ເພື່ອໃຫ້ຜູ້ສອນສາດສະໜາ ແລະ ສະມາຊິກໃນອະນາຄົດເປັນຜູ້ເກັບກ່ຽວ.

ເມື່ອຄົນບໍ່ຍອມຮັບພະກິດຕິຄຸນ, ບໍ່ຕ້ອງທໍ້ຖອຍໃຈ. ທ່ານໄດ້ເປົ່າສຽງເຕືອນແລ້ວ. ທ່ານໄດ້ມອບການເລືອກທີ່ຊັດເຈນໃຫ້ເຂົາເຈົ້າແລ້ວ. ສານຸສິດຂອງພະຄຣິດຮູ້ສຶກເສົ້າສະຫລົດໃຈເມື່ອຄົນເລືອກບໍ່ກັບໃຈ, ແຕ່ເຂົາເຈົ້າເຂົ້າໃຈວ່າຕົວເອງເປັນໃຜ ແລະ ໜ້າທີ່ຂອງຕົນຄືອັນໃດ. ເຂົາເຈົ້າໄດ້ດຳເນີນໄປໜ້າດ້ວຍຄວາມພາກພຽນ.

## ໃຫ້ຈື່ຈຳສິ່ງນີ້

- ສ້າງສາສາດສະໜາຈັກຂຶ້ນ ໂດຍການຊອກຫາ ຜູ້ທີ່ຈະຍອມຮັບເຈົ້າ (see D&C 42:8).
- ສະແຫວງຫາ ແລະ ເຮັດຕາມພະວິນຍານເມື່ອຊອກຫາຄົນ.
- ຄົນໃນເຂດຂອງທ່ານກຳລັງຖືກຕຽມໄວ້ເພື່ອຮັບເອົາພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່.
- ສະມາຊິກຂອງສາດສະໜາຈັກ—ຮ່ວມດ້ວຍຜູ້ທີ່ເຂັ້ມແຂງ, ຜູ້ບໍ່ເຂັ້ມແຂງ, ຜູ້ຈະເປັນແອວເດີ, ແລະ ສະມາຊິກໃໝ່—ເປັນແຫລ່ງທີ່ດີທີ່ສຸດສຳລັບການຊອກຫາຄົນເພື່ອສອນ, ບັບຕິດສະມາ, ແລະ ຢືນຢັນ.
- ພັດທະນາຄວາມສຳພັນທີ່ແໜ້ນແຟ້ນກັບອະທິການ ແລະ ສະມາຊິກ.
- ໃຫ້ສອນຍາມທ່ານພົບ, ໃຫ້ຊອກຫາຍາມທ່ານສອນ.
- ໃຫ້ຮູ້ເຖິງໂອກາດເພື່ອຊອກຫາທີ່ບໍ່ໄດ້ຈັດໄວ້ກ່ອນ.
- ໃຫ້ອະທິຖານຫາໂອກາດທີ່ຈະເຮັດຄຸນງາມຄວາມດີ ແລະ ສອນຂ່າວສານການຟື້ນຟູພະກິດຕິຄຸນຂອງພະເຢຊູຄຣິດ.
- ມີຫລາຍວິທີທາງທີ່ຈະຊອກຫາຄົນເພື່ອສອນ ບໍ່ຕ້ອງເອົາໃຈໃສ່ແຕ່ໜຶ່ງຫລືສອງວິທີທາງເທົ່ານັ້ນ.

ໝາຍເຫດ

## ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

### ການສຶກສາສ່ວນຕົວ

- ໃຫ້ອ່ານຈົດໝາຍຕໍ່ໄປນີ້ທີ່ຜູ້ສອນສາດສະໜາຄົນໜຶ່ງຂຽນໄປຫາພໍ່ແມ່ຂອງນາງ: "ລູກໄດ້ສອນຜູ້ຍິງທີ່ດີຄົນໜຶ່ງໃນລົດເມ. ຕອນນັ້ນພວກເຮົາພາກັນກັບຄືນມາແຕ່ການປະຊຸມທ້ອງຖິ່ນ, ແລະ ມັນເປັນບ່ອນດຽວທີ່ວ່າງ ສະນັ້ນລູກຈຶ່ງ ໄດ້ນັ່ງລົງ ແລະ ເລີ່ມກວດເບິ່ງຈົດໝາຍຂອງລູກ. ແນ່ນອນ, ຈົດໝາຍສະບັບທຳອິດທີ່ລູກອ່ານເປັນຈົດໝາຍຂອງພໍ່ແມ່, ທີ່ມີຮູບແອນ້ອຍ ແອເວັນ. ລູກໄດ້ສັງເກດເຫັນວ່າຜູ້ຢູ່ໃກ້ຂ້າງລູກ ກໍເບິ່ງຮູບຄືກັນ, ແລະ ລູກໄດ້ຫລຽວສົບຕາຂອງຜູ້ຍິງແກ່ຄົນນັ້ນ. ລາວໄດ້ຍິ້ມຕອບລູກໜ້ອຍໜຶ່ງ ແລ້ວປິ່ນໜ້າເບິ່ງອອກນອກລົດ. ແລ້ວລາວຫລັບຕາຄືວ່າລາວຈະນອນ. ລູກໄດ້ອະທິຖານວ່າ, 'ພະບິດາເທິງສະຫວັນ, ຂ້ານ້ອຍຢາກເວົ້ານຳລາວ. ກະລຸນາຊ່ອຍຂ້ານ້ອຍແດ່.' ນາທີໜຶ່ງຕໍ່ໄປ ລາວໄດ້ມືນຕາ ແລະ ນັ່ງຂຶ້ນຕົງໆ, ແລະ ລູກເວົ້າໄວໆວ່າ, 'ເຈົ້າຄິດວ່າລາວໜ້າຮັກບໍ?' ລູກເອົາຮູບແອນ້ອຍ ແອເວັນ ໃຫ້ລາວເບິ່ງ ແລະ ໄດ້ເລີ່ມລົມນຳລາວກ່ຽວກັບຄອບຄົວ. ລູກໄດ້ຖາມເຖິງລູກໆຂອງລາວ, ແລ້ວນ້ຳຕາລາວໄດ້ໄຫລອອກມາ ແລະ ລາວໄດ້ເລົ່າເລື່ອງທີ່ວ່າ ລູກສາວຂອງລາວກຽດຊັງລາວ ແລະ ບໍ່ຢາກມີຫຍັງກ່ຽວຂ້ອງກັບລາວເລີຍ. ລາວໄຫ້ ແລະ ລູກກໍໄດ້ໄຫ້ນຳລາວ. ລູກໄດ້ບອກລາວເຖິງແຜນແຫ່ງຄວາມລອດ ແລະ ວ່າພະບິດາເທິງສະຫວັນຮູ້ຈັກລາວ ແລະ ຮູ້ຈັກວ່າ ລາວກຳລັງຜ່ານຜ່າຫຍັງຢູ່. ລູກໄຫ້ ແລະ ບອກລາວວ່າ ລູກຮູ້ວ່າລູກສາວຂອງລາວຮັກລາວ ເພາະວ່າລູກເປັນລູກສາວຂອງແມ່ທີ່ຮັກລູກ, ແລະ ລູກຮັກແມ່. ລູກໄດ້ອະທິບາຍວ່າ ບາງເທື່ອຄົນເຮົາເລືອກທາງບໍ່ດີ ແລະ ວ່າລູກສາວຂອງລາວມີອິດສະລະທີ່ຈະເລືອກ. ລາວຍິ້ມອອກມາ ແລະ ບອກລູກວ່າ, 'ຂ້ອຍແນ່ໃຈວ່າແມ່ຂອງເຈົ້າຄົງຈະຄິດຮອດເຈົ້າຫລາຍ, ແລະ ລາວຄົງຈະບໍ່ປ່ອຍເຈົ້າໄປອີກເມື່ອລາວເຫັນເຈົ້າ. ລາວຂອບໃຈລູກທີ່ໄດ້ລົມກັບລາວ ແລະ ລາວໄດ້ເອົາທີ່ຢູ່ຂອງລາວໃຫ້ລູກເພື່ອພວກເຮົາຈະສາມາດແບ່ງປັນພະກິດຕິຄຸນກັບລາວ. ໃນຂະນະທີ່ລາວລົງລົດເມໄປ, ລາວເວົ້າວ່າ, 'ຂ້ອຍຂຶ້ນລົດເມຜິດຄັນ, ແຕ່ຂ້ອຍບໍ່ໄດ້ລົງ. ບໍ່ມີໃຜນັ່ງໃກ້ຂ້ອຍຈົນກວ່າເຈົ້າຂຶ້ນມາ . . . ແລ້ວເບິ່ງແມ້ມີຫຍັງເກີດຂຶ້ນ.' ແຜນຂອງພະເຈົ້າຍອດຍ້ຽມແທ້ໆ!"

  ມີຫລັກທຳໃດແດ່ຈາກບົດນີ້ທີ່ທ່ານເຫັນໃນເລື່ອງນີ້? ໃຫ້ທົບທວນບົດນີ້ ແລະ ຈົດລາຍການໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ. ຫລັກທຳຂໍ້ໃດທີ່ທ່ານຈະລອງນຳໄປໃຊ້ໃນມື້ນີ້?

- ອ່ານ ໂຢຮັນ 15:12–13; 21:15–17; 1 ເທຊະໂລນິກ 2; ແລະ ໂມໄຊຍາ 18:8–10. ທ່ານບັນລຸຄວາມຮັບຜິດຊອບຂອງທ່ານໄດ້ດີປານໃດທີ່ຈະຮັກ ແລະ ຮັບໃຊ້ຜູ້ອື່ນ? ທ່ານຈະພັດທະນາໃຫ້ດີຂຶ້ນໄດ້ແນວໃດ? ໃຫ້ຂຽນຄຳຕອບໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

- ຄົນຈະຮູ້ໄດ້ແນວໃດວ່າທ່ານເປັນຜູ້ຮັບໃຊ້ຂອງພະຜູ້ເປັນເຈົ້າ? ເມື່ອທ່ານໄຕ່ຕອງຄຳຖາມນີ້, ໃຫ້ສຶກສາ ໂມໂລໄນ 7:3–5; ມັດທາຍ 7:20; ໂຢຮັນ 13:34–35. ໃຫ້ບັນທຶກຄວາມຄິດຂອງທ່ານໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

- ອ່ານ 3 ນີໄຟ 18:31–32; *Alma* 8:16; *Alma* 24:7–8; ແລະ ແອລະມາ 32:41. ໃຫ້ພິຈາລະນາວ່າຂໍ້ພະຄຳພີເຫລົ່ານີ້ສອນຫຍັງແດ່ກ່ຽວກັບການເຮັດວຽກງານນຳຜູ້ສົນໃຈເກົ່າ. ໃຫ້ບັນທຶກສິ່ງທີ່ທ່ານຮຽນຮູ້ໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ ແລະ ສອນມັນໃຫ້ຄູ່ສອນສາດສະໜາຂອງທ່ານ.

### ການສຶກສາກັບຄູ່ສອນສາດສະໜາ

- ດ້ວຍການໃຊ້ປະຕິທິນປະຈຳວັນ, ໃຫ້ວາງແຜນທີ່ຈະໄປພົບກັບສະມາຊິກໃໝ່. ຂໍໃຫ້ເຂົາເຈົ້າເລົ່າເຖິງວິທີທີ່ເຂົາເຈົ້າຖືກຕຽມໄວ້ສຳລັບພະກິດຕິຄຸນ. ໃຫ້ຖາມຄຳຖາມດັ່ງເຊັ່ນ:

ໝາຍເຫດ

ທ່ານໄດ້ມາຮູ້ຈັກກັບສາດສະໜາຈັກເທື່ອທຳອິດໄດ້ແນວໃດ? ໃນທີ່ສຸດແມ່ນຫຍັງເຮັດໃຫ້ທ່ານຕົກລົງພົບກັບຜູ້ສອນສາດສະໜາ. ໃຫ້ຂຽນສິ່ງທີ່ທ່ານຮຽນຮູ້ໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

- ໃຫ້ທົບທວນຫົວຂໍ້ດັ່ງຕໍ່ໄປນີ້. ດ້ວຍການໃຊ້ບົດຮຽນ, ໃຫ້ຕຽມວິທີຊອກຫາຄົນເພື່ອສອນແບບງ່າຍໆ. ໃຫ້ຝຶກສອນໃນສະພາບການຊອກຫາ ແລະ ຕໍ່ແຕ່ລະຫົວຂໍ້ໃນໄວໆໃສ່ກັບການຟື້ນຟູ.
  - ການຮູ້ສຶກເຖິງຄວາມຈຳເປັນທີ່ຢາກມີການນຳພາ ແລະ ຈຸດປະສົງໃນຊີວິດຫລາຍຂຶ້ນ.
  - ການຢາກເຂົ້າໃກ້ພະເຈົ້າ.
  - ການຕ້ອງການຄວາມຊ່ອຍເຫລືອກັບການຕັດສິນໃຈທີ່ສຳຄັນ.

- ໃຫ້ອ່ານໜ້າທີ 66–68 *of Our Search for Happiness* ແລະ ໜ້າທີ 59–64 *of True to the Faith* ເພື່ອຈະເຂົ້າໃຈພື້ນຖານຄຳສອນຂອງວຽກງານປະຫວັດຄອບຄົວ. ໃຫ້ຕຽມຄຳປາໄສກ່ຽວກັບວຽກງານປະຫວັດຄອບຄົວ, ແລະ ແບ່ງປັນມັນກັບຄູ່ສອນສາດສະໜາຂອງທ່ານ.

- ໃຫ້ສົມມຸດວ່າທ່ານ ແລະ ຄູ່ສອນສາດສະໜາຂອງທ່ານໄດ້ຍ້າຍໄປຢູ່ເຂດໃໝ່. ທ່ານເຫັນປຶ້ມບັນທຶກປະຈຳເຂດວ່າ ຮຽບຮ້ອຍດີ, ແຕ່ທ່ານບໍ່ມີຜູ້ສົນໃຈເລີຍ. ທ່ານຄວນຈະເຮັດແນວໃດເພື່ອຈະມີຄົນເພີ່ມໃສ່ໃນກຸ່ມທີ່ທ່ານຈະສອນ ໃຫ້ໄວເທົ່າທີ່ຈະເປັນໄປໄດ້? ໃຫ້ວາງແຜນປະຕິບັດຕາມແນວຄິດບາງຢ່າງເຫລົ່ານີ້ໃນມື້ນີ້.

- ແນວຄິດດັ່ງຕໍ່ໄປນີ້ໄດ້ມີຜົນສຳເລັດດີສຳລັບຜູ້ສອນສາດສະໜາ ແລະ ສະມາຊິກຫລາຍຄົນ ໃຫ້ອ່ານ ແລະ ສຶກສາແນວຄິດນີ້ກັບຄູ່ສອນສາດສະໜາຂອງທ່ານ.
  - ຊ່ອຍສະມາຊິກໃຫ້ຂຽນຊື່ຂອງໝູ່ເພື່ອນ, ຍາດພີ່ນ້ອງ, ແລະ ຄົນທີ່ເຂົາເຈົ້າຮູ້ຈັກ ທີ່ເຂົາເຈົ້າຈະສາມາດແບ່ງປັນພະກິດຕິຄຸນໃຫ້. ທົບທວນລາຍຊື່ນຳສະມາຊິກ, ແລະ ຊ່ອຍເຂົາເຈົ້າໃຫ້ເລືອກຜູ້ໃດຜູ້ໜຶ່ງດ້ວຍການອະທິຖານ ທີ່ເຂົາເຈົ້າຈະຊ່ອຍຕຽມເພື່ອຟັງພະກິດຕິຄຸນ.
  - ຊ່ອຍເຂົາເຈົ້າຕັ້ງວັນທີທີ່ເຂົາເຈົ້າຈະ *(ກ)* ຕຽມຄົນໃດຄົນໜຶ່ງ ຫລື ຄອບຄົວໜຶ່ງໃຫ້ມາຮຽນຢູ່ບ້ານຂອງເຂົາເຈົ້າ ຫລື *(ຂ)* ເຮັດກິດຈະກຳມິດຕະພາບຕ່າງໆທີ່ຈະຕຽມເຂົາເຈົ້າ. ການຕັ້ງວັນທີໄວ້ ຈະຊ່ອຍໃຫ້ສະມາຊິກມີເປົ້າໝາຍ ແລະ ຊ່ອຍເຂົາເຈົ້າໃຫ້ໃຊ້ສັດທາ.
  - ຊ່ອຍເຂົາເຈົ້າໃຫ້ວາງແຜນສິ່ງທີ່ເຂົາເຈົ້າຈະເຮັດກ່ອນວັນທີທີ່ເຂົາໄດ້ຕັ້ງໄວ້.
  - ໃຫ້ຕິດຕາມເບິ່ງຜົນຕໍ່ໄປກັບເຂົາເຈົ້າເປັນປະຈຳເພື່ອສະໜັບສະໜູນ ແລະ ໃຫ້ກຳລັງໃຈເຂົາເຈົ້າ. ເຊື້ອເຊີນໃຫ້ເຂົາເຈົ້າແບ່ງປັນຄວາມສຳເລັດ ແລະ ຄວາມຫ່ວງໃຍຂອງເຂົາເຈົ້າ.

  ໃຫ້ສົນທະນາວິທີທີ່ທ່ານຈະສາມາດນຳເອົາແນວຄິດນີ້ໄປໃຊ້ໃນເຂດທີ່ທ່ານກຳລັງຮັບໃຊ້ຢູ່.

## ການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດ

- ໃຫ້ອ່ານ ແລະ ສົນທະນາພາກ "ການຊອກຫາຜ່ານຄວາມພະຍາຍາມຂອງທ່ານເອງ."
  - ໃຫ້ສົນທະນາວິທີທີ່ແນວຄິດເຫລົ່ານີ້ໄດ້ຊ່ອຍຜູ້ສອນສາດສະໜາຊອກຫາຄົນເພື່ອສອນໄດ້ແນວໃດ.
  - ໃນກະດານ, ໃຫ້ຂຽນແນວຄິດອື່ນໆສຳລັບການຊອກຫາຄົນເພື່ອສອນ. ເຊື້ອເຊີນໃຫ້ຜູ້ສອນສາດສະໜາສະແດງແນວຄິດຂອງເຂົາເຈົ້າເອງ.
  - ເຊື້ອເຊີນໃຫ້ຜູ້ສອນສາດສະໜາຕັ້ງເປົ້າໝາຍສ່ວນຕົວທີ່ຈະພັດທະນາຄວາມພະຍາຍາມທີ່ຈະຊອກຫາຂອງເຂົາ.

ໝາຍເຫດ

- ໃຫ້ຂຽນລາຍການຂອງການຊອກຫາໃນສະພາບການຕ່າງໆ.
  - ມອບໝາຍສະພາບການໜຶ່ງໃຫ້ຜູ້ສອນສາດສະໜາແຕ່ລະຄົນ. ໃຫ້ເວລາຜູ້ສອນສາດສະໜາແຕ່ລະຄົນ 5 ນາທີເພື່ອຕຽມວິທີທີ່ເຂົາຈະສອນຂ່າວສານຂອງການຟື້ນຟູ. ຖ້າຫາກຈຳເປັນ, ແນະນຳໃຫ້ເຂົາເບິ່ງບົດຮຽນ "ຂ່າວສານຂອງການຟື້ນຟູພະກິດຕິຄຸນຂອງພະເຢຊູຄຣິດ."
  - ໃຫ້ເນັ້ນເຖິງຄວາມສຳຄັນທີ່ຈະໃຫ້ຄວາມຍາວຂອງຂ່າວສານເໝາະສົມກັບສະພາບການ. ຕົວຢ່າງເຊັ່ນ, ຜູ້ສອນສາດສະໜາອາດຈະໃຊ້ເວລາສອນຢູ່ບ້ານສະມາຊິກດົນກວ່າສອນຄົນຢູ່ໃນຕະຫລາດ.
  - ໃຫ້ຜູ້ສອນສາດສະໜາຫລາຍຄົນສອນຂ່າວສານການຟື້ນຟູໃນສະພາບທີ່ມອບໝາຍໃຫ້ເຂົາເຈົ້າ ຕາມເວລາທີ່ມີຢູ່.
- ໃຫ້ສອນຫລັກທຳທີ່ມີຢູ່ໃນພາກ "ໃຫ້ສອນຍາມທ່ານພົບ, ໃຫ້ຊອກຫາຍາມທ່ານສອນ."
  - ມອບໝາຍໃຫ້ຜູ້ສອນສາດສະໜາແຕ່ລະຄົນໃຫ້ຕຽມຂ່າວສານສຳລັບນາທີໜຶ່ງທີ່ເຂົາຈະສອນໃນສະພາບການຊອກຫາຄົນ. ຂ່າວສານເຫລົ່ານີ້ຄວນອີງຕາມຄຳສອນທີ່ມີຢູ່ໃນບົດຮຽນຂອງຜູ້ສອນສາດສະໜາ.
  - ເຊື້ອເຊີນໃຫ້ຜູ້ສອນສາດສະໜາຝຶກສອນຂ່າວສານພາຍໃນໜຶ່ງນາທີຂອງເຂົາໃຫ້ກັນ. ທ່ານອາດຈັດສະພາບການທີ່ແຕກຕ່າງກັນໃນການຊອກຫາຄົນ, ດັ່ງເຊັ່ນການສອນໃນບ້ານຂອງສະມາຊິກ, ສອນຢູ່ປະຕູໜ້າບ້ານ, ສອນຢູ່ໃນທາງຍ່າງ, ຫລືການຕິດຕໍ່ຫາຜູ້ຖືກແນະນຳ. ໃຫ້ຜູ້ສອນສາດສະໜາຝຶກສອນໃນແຕ່ລະສະພາບການເຫລົ່ານີ້.

## ປະທານເຜີຍແຜ່

- ໃຫ້ເປັນຕົວຢ່າງເຖິງການເຮັດວຽກງານເຜີຍແຜ່ໂດຍສະມາຊິກໃນຄອບຄົວຂອງທ່ານ. ແບ່ງປັນປະສົບການຂອງທ່ານກັບຜູ້ສອນສາດສະໜາ ແລະ ສະມາຊິກ.
- ໃຫ້ປຶກສາກັບຜູ້ນຳຖານະປະໂລຫິດເຖິງວິທີທີ່ດີທີ່ສຸດສຳລັບຜູ້ສອນສາດສະໜາ ທີ່ຈະຊອກຫາຄົນເພື່ອສອນໃນເຂດເຜີຍແຜ່ຂອງທ່ານ.
- ໃຫ້ຈັດການປະຊຸມຟາຍເອີຊາຍຂອງຜູ້ສອນສາດສະໜາ ໃນບ່ອນທີ່ທ່ານຈະສາມາດເວົ້າກັບຜູ້ສົນໃຈໃນເຂດເຜີຍແຜ່ຂອງທ່ານ. ໃຫ້ປະສານງານກັບຜູ້ນຳຖານະປະໂລຫິດໃນທ້ອງຖິ່ນເພື່ອຈັດໃຫ້ມີການປະຊຸມຟາຍເອີຊາຍ ເພື່ອສະມາຊິກຈະໄດ້ພາໝູ່ເພື່ອນຂອງເຂົາເຈົ້າມາຮ່ວມນຳ. ໃນສ່ວນໜຶ່ງຂອງການປະຊຸມຟາຍເອີຊາຍເຫລົ່ານີ້, ໃຫ້ສະມາຊິກໃໝ່ກ່າວປະຈັກພະຍານ ແລະ ເລົ່າເລື່ອງການປ່ຽນໃຈເຫລື້ອມໃສຂອງເຂົາເຈົ້າ ກ່ອນທ່ານຈະກ່າວຄຳປາໄສ. ໃຫ້ຄຳປາໄສຂອງທ່ານເຈາະຈົງຢູ່ທີ່ຂ່າວສານຂອງການຟື້ນຟູເທົ່ານັ້ນ.
- ສະແດງໃບລຳດັບເຊື້ອສາຍສີ່ລຸ້ນຄົນໃຫ້ຜູ້ສອນສາດສະໜາເບິ່ງ, ແລະ ອະທິບາຍວິທີທີ່ທ່ານໃຊ້ມັນໃນການຊອກຫາຄົນຂອງທ່ານ.
- ບາງຄັ້ງບາງຄາວ ໃຫ້ໄປຊອກຫາຄົນເພື່ອສອນກັບຜູ້ສອນສາດສະໜາ.



# ເຮົາຈະສາມາດປັບປຸງຄວາມຊຳນານໃນການສອນຂອງເຮົາໄດ້ແນວໃດ?

ໝາຍເຫດ

## ໃຫ້ພິຈາລະນາເລື່ອງນີ້

- ເຮົາຄວນສອນຈາກພະຄຳພີໃນວິທີໃດ?
- ເປັນຫຍັງເຮົາຈຶ່ງຄວນຖາມຄຳຖາມຍາມເຮົາສອນ?
- ເຮົາຄວນຖາມຄຳຖາມແບບໃດ?
- ເຮົາຈະຟັງຜູ້ທີ່ເຮົາສອນ ແລະ ຟັງພະວິນຍານບໍລິສຸດໃຫ້ດີຂຶ້ນໄດ້ແນວໃດ?
- ເຮົາຈະສາມາດຊ່ອຍຄົນແກ້ໄຂບັນຫາຂອງເຂົາໄດ້ແນວໃດ?
- ເຮົາຈະຊ່ອຍຄົນອື່ນໃຫ້ເອົາຊະນະນິໄສບໍ່ດີ ແລະ ການຕິດແສດໄດ້ແນວໃດ?

ທ່ານຖືກເອີ້ນໃຫ້ສອນພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ໃຫ້ຫລາຍໆຄົນທີ່ຈະຍອມຮັບທ່ານ. ການສອນເປັນສູນກາງຂອງທຸກສິ່ງທີ່ທ່ານເຮັດ. ທ່ານຈະພັດທະນາຄຸນສົມບັດຢ່າງພະຄິດ, ສຶກສາບົດຮຽນຂອງຜູ້ສອນສາດສະໜາ, ພັດທະນາຄວາມສາມາດທີ່ຈະເວົ້າພາສາໃນເຂດເຜີຍແຜ່ຂອງທ່ານ, ແລະ ເພິ່ງພາພະວິນຍານບໍລິສຸດ ເພື່ອຈະສອນດ້ວຍພະລັງທີ່ໝັ້ນໃຈ. ພະຜູ້ເປັນເຈົ້າໄດ້ກ່າວຄຳນີ້ວ່າ ເປັນພະບັນຍັດທີ່ມີຄຳສັນຍາ ທີ່ວ່າ:

ກ່ອນເຮົາສະແຫວງຫາເພື່ອປະກາດຄຳຂອງພະອົງ, ທຳອິດໃຫ້ສະແຫວງຫາໃຫ້ໄດ້ຄຳຂອງພະອົງກ່ອນ, ແລະ ເມື່ອນັ້ນລີ້ນຂອງເຮົາຈະຖືກປ່ອຍ. ຖ້າຫາກເຮົາປາດຖະໜາ ເຮົາຈະມີພະວິນຍານຂອງພະອົງ ແລະ ຄຳຂອງພະອົງ, ອຳນາດຂອງພະເຈົ້າໃນການເຮັດໃຫ້ມະນຸດຮັບຮູ້ (see D&C 11:21).

ເຮົາຄວນສະສົມຄຳແຫ່ງຊີວິດໄວ້ໃນຄວາມຄິດຂອງເຮົາສະເໝີ ແລະ ໃນຊົ່ວໂມງນັ້ນແຫລະ ສ່ວນນັ້ນຈະຖືກແຈກຈ່າຍໃຫ້ແກ່ທຸກຄົນ (see D&C 84:85).

ຝ່າຍປະທານສູງສຸດ ແລະ ສະພາອັກຄະສາວົກສິບສອງໄດ້ກ່າວວ່າ: "ຈຸດປະສົງຂອງພວກເຮົາແມ່ນສອນຂ່າວສານຂອງພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ໃນທາງທີ່ຈະອະນຸຍາດໃຫ້ພະວິນຍານນຳທາງຂອງຜູ້ສອນສາດສະໜາ ແລະ ຜູ້ທີ່ຖືກສອນດ້ວຍກັນ. ມັນສຳຄັນທີ່ຈະຮຽນຮູ້ບົດຮຽນຂອງຜູ້ສອນສາດສະໜາ ແຕ່ບໍ່ຄວນສອນບົດຮຽນເຫລົ່ານີ້ດ້ວຍການທ່ອງຈຳ.

ໝາຍເຫດ

ຜູ້ສອນສາດສະໜາຄວນມີອິດສະລະທີ່ຈະໃຊ້ຄຳຂອງເຂົາເອງ ຕາມທີ່ພະວິນຍານບໍລິສຸດກະຕຸ້ນ. ເຂົາບໍ່ຄວນສອນດ້ວຍການທ່ອງຈຳ, ແຕ່ໃຫ້ກ່າວຈາກຈິດໃຈດ້ວຍຄຳຂອງເຂົາເອງ. ເຂົາສາມາດຂ້າມລຳດັບຂອງບົດຮຽນໄດ້ຕາມທີ່ໄດ້ຮັບການດົນໃຈໃຫ້ເຮັດ, ຕາມຄວາມສົນໃຈ ແລະ ຄວາມຕ້ອງການຂອງຜູ້ສົນໃຈ. ໃນການກ່າວຄວາມໝັ້ນໃຈຂອງເຂົາເອງ ແລະ ໃນຄຳຂອງເຂົາເອງ ເຂົາຄວນກ່າວປະຈັກພະຍານຕໍ່ຄວາມຈິງກ່ຽວກັບການສອນຂອງເຂົາ" ("Statement on Missionary Work," First Presidency letter, 11 Dec. 2002).

ໃຫ້ຮຽນອາໄສພະວິນຍານທີ່ຈະມອບສິ່ງທີ່ທ່ານຄວນເວົ້າ ແລະ ເຮັດ. ດ້ວຍການສຶກສາ, ການພັດທະນາ, ແລະ ການໃຊ້ຄວາມຊຳນານໃນການສອນ ໃນບົດນີ້, ທ່ານຈະກາຍເປັນເຄື່ອງມືທີ່ຊຳນານໃນພະຫັດຂອງພະຜູ້ເປັນເຈົ້າ. ພະວິນຍານຈະໃຊ້ແຫລ່ງຄວາມຮູ້ ແລະ ຄວາມຊຳນານທີ່ທ່ານໄດ້ພັດທະນາແລ້ວ ເພື່ອຊ່ອຍໃຫ້ທ່ານສອນຢ່າງມີພະລັງຫລາຍຂຶ້ນ. ຄຸນນະພາບ ແລະ ພະລັງຂອງການສອນຂອງທ່ານ ຈະຊ່ອຍຜູ້ອື່ນໃຫ້ເຂົ້າໃຈ ແລະ ຮູ້ສຶກເຖິງຄວາມສຳຄັນຂອງພະກິດຕິຄຸນທີ່ຖືກຟື້ນຟູຄືນມາໃໝ່ມີສຳລັບເຂົາ. ການມີຄ່າຄວນຂອງທ່ານຈະມີອິດທິພົນຕໍ່ຄວາມເຂົ້າໃຈຂອງເຂົາ. ຄວາມເຂົ້າໃຈຂອງເຂົາແມ່ນຂຶ້ນກັບການເອົາໃຈໃສ່ຂອງທ່ານຕໍ່ເຂົາ, ການອະທິບາຍພະກິດຕິຄຸນໄດ້ດີ, ການໃຊ້ພະຄຳພີ, ການແບ່ງປັນປະຈັກພະຍານ, ການຖາມຄຳຖາມຂອງທ່ານ, ແລະ ການເຊື້ອເຊີນເຂົາໃຫ້ສ້າງ ແລະ ຮັກສາຄຳໝັ້ນສັນຍາຂອງເຂົາ.

### ໃຫ້ເຮັດຕາມພະວິນຍານ

"ພະວິນຍານເປັນສ່ວນທີ່ສຳຄັນທີ່ສຸດໃນວຽກງານນີ້. ໂດຍມີພະວິນຍານມາຂະຫຍາຍການເອີ້ນຂອງທ່ານ, ທ່ານຈະສາມາດເຮັດສິ່ງອັດສະຈັນແທນພະຜູ້ເປັນເຈົ້າໃນສະໜາມເຜີຍແຜ່ໄດ້. ຖ້າປາດສະຈາກພະວິນຍານ, ທ່ານຈະບໍ່ສຳເລັດຫຍັງເລີຍ *ເຖິງແມ່ນວ່າ* ທ່ານຈະມີຄວາມສະຫລາດ ແລະ ຄວາມສາມາດຫລາຍປານໃດກໍຕາມ" (Ezra Taft Benson, seminar for new mission presidents, 25 June 1986).

### ໃຫ້ເຊື້ອເຊີນພະວິນຍານ

ຄຳແນະນຳຕໍ່ໄປນີ້ຈະຊ່ອຍທ່ານໃຫ້ເຊື້ອເຊີນພະວິນຍານບໍລິສຸດໃຫ້ມາສະຖິດຢູ່ນຳໃນຍາມທ່ານສອນ:

- ອະທິຖານ.
- ໃຊ້ພະຄຳພີ.
- ກ່າວປະຈັກພະຍານ.
- ແບ່ງປັນປະສົບການ.
- ສະແດງຄວາມຮັກຕໍ່ພະຜູ້ເປັນເຈົ້າ ແລະ ຄົນອື່ນໆ.

## ວິທີເລີ່ມສອນ

ສອງສາມນາທີທຳອິດນຳຜູ້ສົນໃຈແມ່ນສຳຄັນທີ່ສຸດ. ຜູ້ສົນໃຈຕ້ອງຮຽນໄວ້ວາງໃຈທ່ານ. ໃຫ້ເລີ່ມການຢ້ຽມຢາມເທື່ອທຳອິດດ້ວຍທ່າທາງທີ່ອົບອຸ່ນ, ນັບຖື, ແລະ ຈິງໃຈ. ໃຫ້ຖາມຄຳຖາມສອງສາມຄຳທີ່ຈະຊ່ອຍທ່ານໃຫ້ເຂົ້າໃຈປະຫວັດເລື່ອງສາດສະໜາ ແລະ ຄວາມຄາດຫວັງຂອງເຂົາກ່ຽວກັບການຢ້ຽມຢາມຂອງທ່ານ. ຕົວຢ່າງ, ໃຫ້ຖາມວ່າ, "ສາດສະໜາມີບົດບາດອັນໃດໃນຊີວິດຂອງທ່ານ?" ເຖິງຢ່າງໃດກໍຕາມ, ບໍ່ຕ້ອງຖາມເລື່ອງສ່ວນຕົວທີ່ຈະເຮັດໃຫ້ເຂົາເຈົ້າບໍ່ສະບາຍໃຈ.

ກ່ອນທ່ານເລີ່ມຕົ້ນ, ຂໍໃຫ້ທຸກຄົນທີ່ຢູ່ໃນເຮືອນນັ້ນມາຮ່ວມຮຽນບົດຮຽນນຳທ່ານ. ຂໍໃຫ້ເຂົາເຈົ້າມອດໂທລະທັດ ແລະ ເຊົາເຮັດສິ່ງລົບກວນຕ່າງໆ ເພື່ອພະວິນຍານຂອງພະຜູ້ເປັນເຈົ້າຈະບໍ່ຖືກຂັດຂວາງ.

ໃຫ້ອະທິບາຍວ່າ ທ່ານຢາກຈະເລີ່ມ ແລະ ປິດບົດຮຽນແຕ່ລະບົດດ້ວຍການອະທິຖານ. ໃຫ້ແນະນຳວ່າ ທ່ານຈະເປັນຜູ້ອະທິຖານເປີດ. ໃຫ້ອະທິຖານແບບງ່າຍໆແຕ່ດ້ວຍຄວາມຈິງໃຈວ່າ ພະຜູ້ເປັນເຈົ້າຈະໃຫ້ພອນ ຜູ້ທີ່ທ່ານກຳລັງສອນໃນທຸກໆດ້ານໃນຊີວິດຂອງເຂົາ, ແລະ ໂດຍສະເພາະ ໃຫ້ເຂົາສາມາດຮູ້ສຶກເຖິງຄວາມຈິງກ່ຽວກັບສິ່ງທີ່ທ່ານຈະສອນ.

ໃຫ້ສະແດງຄວາມສົນໃຈ ແລະ ຄວາມຮັກທີ່ຈິງໃຈຕໍ່ຜູ້ສົນໃຈ ແລະ ສັດທາໃນພະລັງແຫ່ງການປ່ຽນໃຈຂອງພະກິດຕິຄຸນ (ເບິ່ງ ໂມໂລໄນ 7:43–48). ເມື່ອຖືກນຳພາໂດຍພະວິນຍານ, ທ່ານຄວນສະແດງຄວາມຄິດດັ່ງຕໍ່ໄປນີ້ ແກ່ຜູ້ສົນໃຈຂອງທ່ານ:

- ເພາະວ່າພະເຈົ້າເປັນພະບິດາເທິງສະຫວັນຂອງເຮົາ, ເຮົາຈຶ່ງເປັນອ້າຍເອື້ອຍນ້ອງກັນ. ພວກເຮົາຢາກຈະເອີ້ນທ່ານວ່າ ອ້າຍ, ເອື້ອຍ, ຫລື ເອີ້ນເຈົ້າວ່າ ນ້ອງ.
- ແຕ່ລະຄົນທີ່ພວກເຮົາສອນ ຈະມີສິ່ງທ້າທາຍ ແລະ ຄວາມຫ່ວງໄຍສ່ວນຕົວ. ເຖິງແມ່ນວ່າ ທ່ານມີຄວາມຕ້ອງການ ຫລື ຄວາມຫ່ວງໄຍອັນໃດກໍຕາມ, ແຕ່ພະຜູ້ຊ່ອຍໃຫ້ລອດ ແລະ ຄຳສອນຂອງພະອົງ—ພະກິດຕິຄຸນ—ຈະຊ່ອຍທ່ານ.

ໝາຍເຫດ

- ຂ່າວສານຂອງພວກເຮົາຈະຊ່ອຍທ່ານໃຫ້ພັດທະນາຄຸນນະພາບໃນຊີວິດຂອງທ່ານ. ມັນຈະຊ່ອຍທ່ານໃຫ້ຈັດການກັບບັນຫາ ແລະ ສິ່ງທ້າທາຍທີ່ເຮົາທຸກຄົນປະເຊີນໃນຊີວິດ.
- ຂ່າວສານຂອງພວກເຮົາ, ທີ່ເຈາະຈົງໃສ່ພະເຢຊູຄຣິດ, ແມ່ນມີຄຸນຄ່າອັນໃຫຍ່ຫລວງ ແລະ ສຳຄັນຫລາຍ.
- ເຮົາທຸກຄົນຈະເຮັດຄວາມຜິດໃນຊີວິດ, ແລະ ຄວາມຜິດເຫລົ່ານີ້ຈະເຮັດໃຫ້ເຮົາຮູ້ສຶກວ່າຕົນຜິດ ແລະ ມີຄວາມອັບອາຍ. ຄວາມຮູ້ສຶກເຫລົ່ານີ້ຈະຫາຍໄປບໍ່ໄດ້ ປາດສະຈາກການກັບໃຈ ແລະ ການໃຫ້ອະໄພ. ມັນຈະໄດ້ຮັບການປິ່ນປົວໃຫ້ຫາຍດີຜ່ານທາງການຊົດໃຊ້ຂອງພະຄຣິດ.
- ຈະຮຽນຂ່າວສານຂອງພວກເຮົາໃນບາດດຽວບໍ່ໄດ້. ຄວາມເຂົ້າໃຈຈະມາເຖິງຕາມເວລາ ຜ່ານທາງການອະທິຖານ, ການສຶກສາ, ປະສົບການ, ແລະ ການຮັກສາພະບັນຍັດຂອງພະເຈົ້າ.
- ພວກເຮົາມີຄວາມອ່ອນແອ, ເໝືອນກັບທຸກຄົນ. ພວກເຮົາອາດຈະເວົ້າພາສາຂອງທ່ານບໍ່ເກັ່ງ ຫລື ບໍ່ຮູ້ຕອບຄຳຖາມຂອງທ່ານທຸກໆຄຳທີ່ທ່ານມີ. ແຕ່ພວກເຮົາໄດ້ຖືກເອີ້ນ ໂດຍສາດສະດາຂອງພະເຈົ້າ ໃຫ້ມາແບ່ງປັນສິ່ງທີ່ພວກເຮົາຮູ້. ພວກເຮົາຮູ້ວ່າ ຂ່າວສານຂອງພວກເຮົາເປັນຄວາມຈິງ.
- ພວກເຮົາຈະເປັນຜູ້ນຳພາເພື່ອທ່ານຈະສາມາດຮຽນຮູ້ຄວາມຈິງຂອງຂ່າວສານຂອງພວກເຮົາດ້ວຍຕົວທ່ານເອງ. ສະນັ້ນ, ທ່ານສາມາດຖາມພວກເຮົາໄດ້ຕາມສະບາຍ.
- ໃນຂະນະທີ່ທ່ານສະແຫວງເພື່ອຈະໄດ້ເຂົ້າໃຈຂ່າວສານຂອງພວກເຮົາ, ທ່ານອາດຈະປະເຊີນກັບການທ້າທາຍ, ແຕ່ພະເຈົ້າຈະຊ່ອຍທ່ານ.
- ເມື່ອທ່ານຍອມຮັບຂ່າວສານຂອງພວກເຮົາ, ທ່ານຈະຮຽນຮູ້ວິທີທີ່ຈະເຮັດພັນທະສັນຍາ, ຫລື ຄຳສັນຍາກັບພະເຈົ້າ. ທ່ານຈະຮຽນຮູ້ວິທີທີ່ຈະປ່ຽນແປງຊີວິດຂອງທ່ານໃຫ້ສອດຄ່ອງກັບຄຳສອນຂອງພະອົງ. ທ່ານຈະຢາກເຮັດຕາມຄຳສອນຂອງພະເຢຊູຄຣິດ ແລະ ຮັບບັບຕິດສະມາໂດຍອຳນາດທີ່ຖືກຕ້ອງ (ເບິ່ງ ໂຢຮັນ 3:5).

ກ່ອນການສອນຄຳສອນໃນບົດຮຽນ, ໃຫ້ພິຈາລະນາສະຫລຸບສິ່ງທີ່ທ່ານຈະສອນແບບງ່າຍໆ. ຊ່ອຍໃຫ້ເຂົາເຈົ້າເຫັນວ່າມັນຈະມີຄວາມສຳຄັນສ່ວນຕົວສຳລັບເຂົາ. ຜູ້ສົນໃຈທີ່ທ່ານສອນສ່ວນຫລາຍແລ້ວແມ່ນຖືກຕຽມໄວ້ໂດຍພະຜູ້ເປັນເຈົ້າ (see Alma 16:16–17). ເມື່ອທ່ານແບ່ງປັນປະສົບການທາງວິນຍານນຳກັນໃນການພົບກັນຄັ້ງທຳອິດ, ເຂົາເຈົ້າຈະຮັບຮູ້ວ່າທ່ານເປັນຜູ້ຮັບໃຊ້ຂອງພະຜູ້ເປັນເຈົ້າ.

**ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ**

ນຳຄູ່ສອນສາດສະໜາຂອງທ່ານ, ໃຫ້ຝຶກວິທີຕ່າງໆໃນການເລີ່ມສອນບົດຮຽນດ້ວຍການນຳໃຊ້ຂໍ້ແນະນຳຫລາຍຂໍ້ເຫລົ່ານີ້.

## ດັດແປງການສອນຂອງທ່ານໃຫ້ເຂົ້າກັບຄວາມຕ້ອງການ



ແຕ່ລະຄົນ ຫລື ຄອບຄົວທີ່ທ່ານສອນແມ່ນພິເສດ. ເຖິງແມ່ນວ່າທ່ານບໍ່ເຂົ້າໃຈຄວາມສົນໃຈ, ຄວາມສຳເລັດ, ຄວາມຕ້ອງການ, ແລະ ຄວາມຫ່ວງໄຍທັງໝົດຂອງເຂົາ ແຕ່ທ່ານຄວນສະແຫວງເພື່ອເຂົ້າໃຈສະພາບການຂອງເຂົາ. ເຖິງແມ່ນວ່າຄວາມຕ້ອງການ ຫລື ບັນຫາຂອງເຂົາຈະເປັນແນວໃດກໍຕາມ, ແຕ່ຄົນທຸກຄົນຈະໄດ້ຮັບຄວາມຊ່ອຍເຫລືອ ເມື່ອເຂົາຍອມຮັບ ແລະ ດຳລົງຊີວິດຕາມພະກິດຕິຄຸນ. ທ່ານຈະສາມາດປັບການສອນຂອງທ່ານ ເມື່ອທ່ານໄດ້ຮັບການກະຕຸ້ນຈາກພະວິນຍານ.

ທ່ານສາມາດປ່ຽນລຳດັບບົດຮຽນ ຕາມທີ່ທ່ານໄດ້ຮັບການດົນໃຈ ເພື່ອໃຫ້ເຂົ້າກັບຄວາມສົນໃຈ ແລະ

ໝາຍເຫດ

ຄວາມຕ້ອງການຂອງຜູ້ສົນໃຈ. ທ່ານອາດຈະໃຊ້ເວລາຫລາຍກວ່າການນັດໝາຍເທື່ອໜຶ່ງເພື່ອສອນຫລັກທຳໃນບົດຮຽນໜຶ່ງ, ແລະ ບາງຄັ້ງທ່ານອາດຈະສອນຂໍ້ຄວາມຈາກບົດຮຽນສອງບົດໃນການນັດໝາຍເທື່ອດຽວ. ພະບິດາເທິງສະຫວັນຮູ້ຈັກລູກໆຂອງພະອົງ, ສະນັ້ນໃຫ້ເພິ່ງການດົນໃຈເພື່ອຈະຕັດສິນໃຈໃນເລື່ອງນີ້ ເມື່ອທ່ານສອນ. ໃຫ້ອະທິຖານ ເພື່ອຂໍພອນຂອງການຕັດສິນໃຈ, ແລະ ໃຫ້ເອົາໃຈໃສ່ຕໍ່ຄວາມຄິດ ທີ່ເຂົ້າມາໃນຈິດໃຈຂອງທ່ານ ຫລື ຄວາມຮູ້ສຶກ ທີ່ທ່ານມີກ່ຽວກັບສິ່ງທີ່ທ່ານສອນ.

ທ່ານຕ້ອງປ່ຽນແປງການສອນຂອງທ່ານເພື່ອຈະມີການເອົາໃຈໃສ່ຕໍ່ຄຳໝັ້ນສັນຍາທີ່ຍາກສຳລັບຜູ້ສົນໃຈຈະຮັກສາໄດ້. ຕົວຢ່າງເຊັ່ນ, ບາງຄົນອາດຈະຍອມຮັບພະຄຳພີມໍມອນວ່າເປັນຄຳຂອງພະເຈົ້າ, ໃນເວລາດຽວກັນນັ້ນ ຜູ້ອື່ນອາດມີບັນຫາຍອມຮັບອັນໃດເລີຍນອກຈາກພະຄຳພີໄບເບິ້ນ. ບາງຄົນອາດຈະມີບັນຫາເລື່ອງເຊົາໃຊ້ຢາຄູດ, ແຕ່ຈະຍອມຮັບກົດສ່ວນສິບໄດ້ໃນທັນທີ.

ເມື່ອທ່ານວາງແຜນວ່າຈະສອນຄຳສອນຂໍ້ໃດ, ໃຫ້ລະວັງກ່ຽວກັບວ່າ ຈະແບ່ງປັນລາຍລະອຽດໃໝ່ຫລາຍປານໃດ. ໃຫ້ສອນໃນຄວາມໄວທີ່ເໝາະສົມກັບຜູ້ສົນໃຈ. ບາງຄົນຈະກ້າວໜ້າໄວກວ່າ ຫລື ຊ້າກວ່າຜູ້ອື່ນ. ໃຫ້ຖາມຄຳຖາມພຽງພໍ ແລະ ໃຫ້ຟັງຄຳຕອບຂອງເຂົາດ້ວຍຄວາມລະມັດລະວັງ ເພື່ອທ່ານຈະມີຄວາມເຂົ້າໃຈເປັນຢ່າງດີວ່າ ຜູ້ສົນໃຈກຳລັງຮຽນຮູ້ ແລະ ນຳໃຊ້ຄຳສອນທີ່ທ່ານສະເໜີໄດ້ໄວ ແລະ ດີປານໃດ.

ໃຫ້ລະວັງເລື່ອງເວລາ. ການນັດສອນສ່ວນຫລາຍບໍ່ຄວນດົນເກີນກວ່າ 45 ນາທີ. ເຖິງຢ່າງໃດກໍຕາມ, ຖ້າຫາກຈຳເປັນ, ການປະຊຸມສອນອາດຈະສຳເລັດໄດ້ພາຍໃນ 15 ຫລື 20 ນາທີ. ຖ້າເຂົາເຈົ້າມີເວລາພົບກັບທ່ານພຽງແຕ່ 15 ນາທີ, ໃຫ້ປັບການສອນຂອງທ່ານຕາມເວລາທີ່ມີຢູ່.

ໃຫ້ໄວ້ວາງໃຈໃນຄຳສັນຍາທີ່ພະວິນຍານຈະມອບໃຫ້ທ່ານ ໃນໂມງນັ້ນແຫລະ,ໃນຂະນະນັ້ນແຫລະ, ວ່າທ່ານຈະກ່າວອັນໃດ (see D&C 100:6).

### ກິດຈະກຳ: ການສຶກສາສ່ວນຕົວ

ໃຫ້ສົມມຸດວ່າ ທ່ານກຳລັງຍ່າງໄປຕາມທາງ ແລະ ເຫັນພໍ່ເຖົ້າຄົນໜຶ່ງກຳລັງພະຍາຍາມເອົາຖົງທີ່ໜັກໆໃສ່ຖັງຂີ້ເຫຍື້ອ. ທ່ານ ແລະ ຄູ່ສອນສາດສະໜາຂອງທ່ານໄດ້ຊ່ອຍລາວ, ແລະ ຍ້ອນການນີ້ ລາວໄດ້ຖາມພວກທ່ານວ່າ ພວກທ່ານເປັນໃຜ. ຫລັງຈາກການສົນທະນາເລັກນ້ອຍ ລາວໄດ້ເຊີນພວກທ່ານເຂົ້າໄປເຮືອນລາວ ແລະ ຕົກລົງທີ່ຈະຟັງຂ່າວສານຂອງພວກທ່ານ. ໃນການເວົ້າລົມກັນຄັ້ງທຳອິດ ລາວບອກພວກທ່ານວ່າ:

- ເມຍຂອງລາວຕາຍໄດ້ໜຶ່ງປີແລ້ວ, ແລະ ລາວຄິດເຖິງເມຍລາວຫລາຍ.
- ລາວເມື່ອຍໄວຍ້ອນພະຍາດຫົວໃຈ.
- ດຽວນີ້ລາວໄຕ່ຕອງຫລາຍກວ່າແຕ່ກ່ອນວ່າ ພະເຈົ້າມີແທ້ບໍ.

ທ່ານຈະສອນຫຍັງໃຫ້ລາວ? ທ່ານຈະປັບການສອນຂອງທ່ານໃຫ້ເຂົ້າກັບຄວາມຕ້ອງການ ແລະ ຄວາມຫ່ວງໄຍຂອງລາວໄດ້ແນວໃດ?

### ການສຶກສາພະຄຳພີ

**ຄຳທີ່ວ່າ "ສ່ວນນັ້ນຈະຖືກແຈກຈ່າຍໃຫ້ແກ່ທຸກຄົນ" ມີຄວາມໝາຍວ່າແນວໃດ?**

Alma 29:8 D&C 84:85

**ພະຜູ້ເປັນເຈົ້າໄດ້ສັນຍາຫຍັງແດ່ກັບຜູ້ສອນສາດສະໜາທີ່ສັດຊື່?**

D&C 68:2–4 D&C 100:5–8 ມັດທາຍ 10:19–20

## ໃຫ້ສອນກັບຄູ່ສອນສາດສະໜາຂອງທ່ານດ້ວຍຄວາມສາມັກຄີກັນ

ພະຜູ້ເປັນເຈົ້າໄດ້ບັນຊາວ່າ ເຮົາຄວນອອກໄປເປັນຄູ່ໆໃນອຳນາດຂອງພະວິນຍານຂອງພະອົງ, ເພື່ອສັ່ງສອນພະກິດຕິຄຸນຂອງພະອົງ (see D&C 42:6). ການສອນຂອງທ່ານຈະມີພະລັງ ແລະ ໜ້າສົນໃຈຫລາຍຂຶ້ນ ຖ້າຫາກທ່ານ ແລະ ຄູ່ສອນສາດສະໜາຂອງທ່ານເຮັດວຽກນຳກັນໃນຄວາມສາມັກຄີ. ເມື່ອທ່ານວາງແຜນ ແລະ ສຶກສາແຕ່ລະມື້, ໃຫ້ສົນທະນາເຖິງວິທີທີ່ທ່ານຈະສອນ ເພື່ອທ່ານຈະສາມາດເປັນໜຶ່ງ ແລະ ສອນດ້ວຍສຽງດຽວ.

ໝາຍເຫດ



ການສອນຂອງທ່ານຈະມີພະລັງຫລາຍຂຶ້ນ ຖ້າຫາກທ່ານ ແລະ ຄູ່ສອນສາດສະໜາຂອງທ່ານ ປ່ຽນກັນສອນແຕ່ລະສ່ວນໃນບົດຮຽນ. ໃຫ້ຫລີກເວັ້ນຈາກການເຮັດແບບດຽວກັນເປັນປະຈຳເມື່ອທ່ານສະເໜີຂ່າວສານ. ໃຫ້ສະໜັບສະໜູນຄູ່ສອນສາດສະໜາຂອງທ່ານ ໂດຍການເປັນພະຍານທີ່ສອງຕໍ່ຄວາມຈິງທີ່ເຂົາໄດ້ສະແດງປະຈັກພະຍານແລ້ວ. ໃຫ້ເຮັດຕາມຄວາມປະທັບໃຈຂອງທ່ານເມື່ອພະວິນຍານບໍລິສຸດກະຕຸ້ນໃຫ້ທ່ານກ່າວອັນໃດອັນໜຶ່ງ. ໃນຖານະທີ່ເປັນຄູ່ສອນສາດສະໜາ, ໃຫ້ຕຽມເປີດທາງໃຫ້ກັນແລະກັນ ເພື່ອທ່ານຈະບໍ່ໄດ້ຂັດຂວາງການນຳພາຂອງພະວິນຍານ. ເມື່ອທ່ານເວົ້າ, ໃຫ້ແນມເບິ່ງຕາຂອງຜູ້ສົນໃຈ. ເມື່ອທ່ານບໍ່ໄດ້ເວົ້າ, ໃຫ້ອະທິຖານເພື່ອຄູ່ສອນສາດສະໜາຂອງທ່ານ ແລະ ໃຫ້ສັງເກດເບິ່ງຄຳຕອບຂອງຜູ້ສົນໃຈຢ່າງລະມັດລະວັງ.

### ການສຶກສາພະຄຳພີ

**ຄູ່ສອນສາດສະໜາຈະສະໜັບສະໜູນກັນໄດ້ວິທີໃດ?**

ແອລະມາ 12:1 D&C 42:6 D&C 52:9–10

## ເຊື້ອເຊີນສະມາຊິກໃຫ້ຊ່ອຍທ່ານສອນ

ເມື່ອໃດທີ່ເປັນໄປໄດ້ ໃຫ້ເຊື້ອເຊີນສະມາຊິກໄປຊ່ອຍທ່ານສອນ, ດີແທ້ແມ່ນຜູ້ເປັນສະມາຊິກໃໝ່. ສິ່ງທີ່ດີທີ່ສຸດ ແມ່ນໃຫ້ຮ່ວມທັງສະມາຊິກຂອງສາດສະໜາຈັກຜູ້ທີ່ເຄີຍຖືສາດສະໜາດຽວກັນກັບຜູ້ສົນໃຈ. ເອົາບົດຮຽນທີ່ຈະສອນໃຫ້ສະມາຊິກເບິ່ງ, ແລະ ສົນທະນາວ່າທ່ານຢາກໃຫ້ເຂົາສອນຫຍັງ. ໃຫ້ສົນທະນາວິທີທີ່ຈະເຮັດວຽກນຳກັນ. ຕົວຢ່າງເຊັ່ນ, ຕາມທີ່ເໝາະສົມ, ໃຫ້ສະມາຊິກແບ່ງປັນເຖິງວິທີທີ່ເຂົາສາມາດຮຽນຮູ້, ຍອມຮັບ, ແລະ ດຳລົງຊີວິດຕາມຫລັກທຳຂໍ້ໃດຂໍ້ໜຶ່ງໃນບົດຮຽນ. ໃຫ້ເຂົາອະທິບາຍເຖິງວິທີທີ່ເຂົາຕັດສິນໃຈເລືອກເຂົ້າຮ່ວມສາດສະໜາຈັກ. ເມື່ອສະມາຊິກເຂົ້າຮ່ວມໃນການສອນ, ເຂົາຈະມີໂອກາດຮູ້ສຶກເຖິງຄວາມສຸກຂອງວຽກງານເຜີຍແຜ່. ພ້ອມນີ້ກໍເປັນການຜູກມິດກັບຜູ້ສົນໃຈນຳອີກ. ປະທານ ມອນສັນ ໄດ້ສອນວ່າ:

> *ໃນຊ່ວງການສອນ ຜູ້ສົນໃຈສາມາດໄດ້ຮັບຜົນປະໂຫຍດຈາກຄວາມເຂັ້ມແຂງຂອງປະຈັກພະຍານຂອງຄູ່ຜົວເມຍທີ່ໄດ້ມາສອນສາດສະໜານຳ ທີ່ໄດ້ຮັບບັບຕິດສະມາ ແລະ ເຂົ້າຮ່ວມເປັນສະມາຊິກໃນສາດສະໜາຈັກ ໃນບໍ່ຫລາຍປີຜ່ານມານັ້ນ. ໃນເຂດເຜີຍແຜ່ປູ່ ອອນແທລິໂອ ແລະ ຄວາເບັກ ປະເທດການາດາ, ບ່ອນທີ່ຄອບຄົວຂອງຂ້າພະເຈົ້າໄດ້ອາໄສຢູ່ ຕອນຂ້າພະເຈົ້າໄດ້ເປັນປະທານເຜີຍແຜ່, ພວກເຮົາໄດ້ເຫັນວ່າ ປະຊາຊົນສ່ວນໃຫຍ່ໄດ້ເປັນສະມາຊິກຂອງສາມສາດສະໜາໃຫຍ່. ກາໂຕລິກ, Anglican, ແລະ United Church of Canada. ໃນທຸກໆເມືອງໃນເຂດເຜີຍແຜ່ ພວກເຮົາໄດ້ຈັດໃຫ້ຄອບຄົວໃໝ່ທີ່ໄດ້ຮັບບັບຕິດສະມາໃນບໍ່ດົນນັ້ນ ທີ່ເຄີຍເປັນສະມາຊິກໃນສາດສະໜານັ້ນແຕ່ກ່ອນ ໃຫ້ຈັດເວລາໄວ້ສຳລັບຜູ້ສອນສາດສະໜາຜູ້ທີ່ກຳລັງສອນຜູ້ສົນໃຈໃໝ່ ເພື່ອເຂົາເຈົ້າຈະໄດ້ໄປກັບທີມຜູ້ສອນສາດສະໜາໃນເວລາຢ້ຽມຢາມຄັ້ງທີສອງ ຫລື ທີສາມ.*
>
> *ຕົວຢ່າງເຊັ່ນ, ທ່ານຈະເຫັນຄຸນຄ່າປະຈັກພະຍານທີ່ເຂັ້ມແຂງຂອງ ບະລາເດີ ແລະ ຊິດສະເຕີ ວິວລຽມ ສະໂຕນແມນ ເມື່ອຜູ້ສອນສາດສະໜາສອນຄົນທີ່ມາຈາກສາດສະໜາ United Church of Canada. ບະລາເດີ ສະໂຕນແມນ. ຜູ້ເປັນນັກພິມ ຈະກ່າວວ່າ, "ກ່ອນຂ້ອຍເຂົ້າຮ່ວມສາດສະໜາຈັກຂອງພະເຍຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍ, ຂ້ອຍເຄີຍເປັນຫົວໜ້ານັກພິມໃຫ້ສາດສະໜາ United Church. ຂ້ອຍໄດ້ເສຍໜ້າທີ່ນັ້ນໄປ. ແຕ່ຕອນນີ້ ຂ້ອຍໄດ້ວຽກໃໝ່ທີ່ດີກວ່າເກົ່າ. ສຳຄັນກວ່ານັ້ນ, ຂ້ອຍໄດ້ພົບຄວາມຈິງທີ່ຄົບຖ້ວນ. ເຈົ້າກໍສາມາດປ່ຽນແປງໄດ້ຄືກັນ. ເຈົ້າກໍສາມາດຕັດສິນໃຈເຮັດແບບດຽວກັນນັ້ນໄດ້ຄືກັນ. ແທ້ຈິງແລ້ວ, ໃຫ້ພວກເຮົາມາຮັບເອົາເຈົ້າຕອນເຊົ້າວັນທິດນີ້ໄດ້ບໍ ເພື່ອພວກເຮົາຈະໄດ້ນັ່ງນຳກັນຢູ່ໂບດ. ແລ້ວເຈົ້າຈະໄດ້ຍິນ ແລະ ຮູ້ສຶກເອງ. ພວກເຮົາຈະຢູ່ຄຽງຂ້າງເຈົ້າ."*
>
> *ແອນຕະນີ ແລະ ອີເດັດ ແບວຟົກລິໂອ ໄດ້ກາຍເປັນຄູ່ຜົວເມຍທີ່ຜູກມິດໄດ້ດີຫລາຍກັບຜູ້ເຄີຍໄດ້ເປັນສະມາຊິກຂອງສາດສະໜາກາໂຕລິກ. ຜົນສະທ້ອນກໍຄືກັນ. ມັນເປັນໄປໄດ້. ແລະ ຜູ້ທີ່ປ່ຽນໃຈເຫລື້ອມໃສແບບນີ້ ຈະໝັ້ນຄົງໃນ*

ໝາຍເຫດ

*ຄວາມເຫລື້ອມໃສຂອງເຂົາຕໍ່ໄປ. ນອກເໜືອຈາກນີ້, ຄູ່ຜົວເມຍທີ່ເລືອກເຮັດໜ້າທີ່ນີ້ໃຫ້ສຳເລັດ ຈະໝັ້ນຄົງ ແລະ ເຂັ້ມແຂງຂຶ້ນໃນພະກິດຕິຄຸນ. ບະລາເດີ ສະໂຕນແມນ ແລະ ບະລາເດີ ແບວຟິກລີໂອ ທັງສອງໄດ້ຖືກແຕ່ງຕັ້ງຕໍ່ຕຳແໜ່ງປິຕຸ. ການຮ່ວມມືຂອງສະມາຊິກ ແລະ ຜູ້ສອນສາດສະໜາໃນໜ້າທີ່ເຊັ່ນນີ້ ຈະນຳຈິດວິນຍານທີ່ລ້ຳຄ່າຢ່າງຫລວງຫລາຍເຂົ້າມາໃນສາດສະໜາຈັກ (missionary training satellite broadcast, 25 Apr. 2003).*

### ກິດຈະກຳ: ການສຶກສາສ່ວນຕົວ

ໃຫ້ສົມມຸດວ່າ ທ່ານມີການນັດພົບຄັ້ງທຳອິດທີ່ຈະສອນບົດຮຽນໃຫ້ຄອບຄົວໜຶ່ງ ຢູ່ບ້ານຂອງສະມາຊິກ. ໃຫ້ຕັດສິນໃຈວ່າ ທ່ານຄວນຈະຕຽມໃຫ້ສະມາຊິກແຕ່ລະຄົນຊ່ອຍທ່ານສອນແນວໃດ:

- ຜູ້ສອນສາດສະໜາປະຈຳຫວອດທີ່ຫາກໍກັບມາຈາກການເຜີຍແຜ່ເຕັມເວລາ.
- ປະໂລຫິດ
- ສະມາຊິກໃໝ່
- ອະທິການ

## ໃຊ້ພະຄຳພີ

ພະຄຳພີມາດຕະຖານສີ່ເຫລັ້ມຂອງສາດສະໜາຈັກເປັນພື້ນຖານສຳລັບການສອນພະກິດຕິຄຸນ ທີ່ຟື້ນຟູຄືນມາໃໝ່ຂອງພະເຢຊູຄຣິດ. ພ້ອມນີ້ທ່ານກໍສາມາດໃຊ້ຄຳຂອງສາດສະດາ ທີ່ມີຊີວິດຢູ່ນຳອີກ. ມັນມີຫລາຍເຫດຜົນທີ່ສຳຄັນ ທີ່ຈະໃຊ້ພະຄຳພີໃຫ້ເປັນພື້ນຖານສຳລັບການສອນຂອງທ່ານ. ຕົວຢ່າງເຊັ່ນ:

- ພະຜູ້ເປັນເຈົ້າ ແລະ ສາດສະດາຂອງພະອົງໄດ້ສັ່ງເຮົາໃຫ້ເຮັດແບບນີ້ (see D&C 42:12, 56–58; 71:1). ສາດສະດາໃນຍຸກສຸດທ້າຍໄດ້ແນະນຳວ່າ, "ພະຄຳ ແລະ ວິທີທີ່ໄດ້ໃຊ້ໃນພະຄຳພີມໍມອນ ໂດຍພະຜູ້ເປັນເຈົ້າ . . . ຄວນຖືກໃຊ້ໃນການສອນຫລັກທຳພະກິດຕິຄຸນ" Ezra Taft Benson, "The Book of Mormon and the Doctrine and Covenants," *Ensign*, May 1987, 84).
- ພະຄຳພີເຊື້ອເຊີນພະວິນຍານບໍລິສຸດໃຫ້ມາສະຖິດຢູ່ນຳການສອນຂອງທ່ານ. ພະຄຳພີສອນພະຄຳຂອງພະເຈົ້າດ້ວຍອຳນາດ (see Alma 31:5).
- ພະຄຳພີຕອບຄຳຖາມທີ່ສຳຄັນຂອງຈິດວິນຍານ (ເບິ່ງ 2 ນີໄຟ 32:3; Jacob 2:8).
- ພະຄຳພີໃຫ້ອຳນາດ ແລະ ຄວາມຖືກຕ້ອງຕໍ່ການສອນຂອງທ່ານ, ແມ້ແຕ່ໃນເຂດທີ່ຂາດພື້ນຖານຊາວຄຣິດສະຕຽນ.

ຄວາມສາມາດຂອງທ່ານທີ່ຈະສອນດ້ວຍພະລັງຈາກພະຄຳພີ ສ່ວນຫລາຍແມ່ນມາຈາກເວລາທີ່ທ່ານໃຊ້ໃນການສຶກສາມັນ. ເມື່ອທ່ານຊຸ່ມຊື່ນຢູ່ດ້ວຍຄຳຂອງພະຄຣິດທຸກໆມື້, ຄວາມສາມາດຂອງທ່ານທີ່ຈະສອນຈາກພະຄຳພີຈະກ້າວໜ້າຂຶ້ນ. ນອກເໜືອກວ່ານີ້, ການເຊື້ອເຊີນຂອງທ່ານໃຫ້ເຂົາສຶກສາ ແລະ ໄຕ່ຕອງພະຄຳພີ ຈະມີອິດທິພົນຫລາຍຂຶ້ນ ເພາະວ່າ ທ່ານກໍເຮັດສິ່ງດຽວກັນໃນຊີວິດຂອງທ່ານ. ຈົ່ງຊ່ອຍຄົນໃຫ້ມີສັດທາໃນພະຄຳພີ—ໂດຍສະເພາະພະຄຳພີມໍມອນ—ໃຫ້ເປັນແຫລ່ງເປີດເຜີຍຄວາມຈິງ. ເມື່ອຄົນມາເຊື່ອພະຄຳພີ, ທ່ານຈະສາມາດຊ່ອຍເຂົາໃຫ້ເຂົ້າໃຈຄຳສອນຢ່າງຖືກຕ້ອງ. ຄຳແນະນຳດັ່ງຕໍ່ໄປນີ້ອາດຈະຊ່ອຍທ່ານໄດ້.


© Greg K. Olsen. ຫ້າມລອກແບບ.

**ແນະນຳພະຄຳພີ.** ໃຫ້ບັນຍາຍສັ້ນໆເຖິງປະຫວັດ ແລະ ເນື້ອໃນຂອງຂໍ້ທີ່ທ່ານຈະໃຊ້. ເຊື້ອເຊີນຜູ້ສົນໃຈໃຫ້ຊອກຫາ

ໝາຍເຫດ

ຈຸດສະເພາະໃນຂໍ້ນັ້ນ. ເມື່ອທ່ານສອນຄົນທີ່ບໍ່ຮູ້ພະຄຳພີຫລາຍ, ທ່ານອາດຈະຕ້ອງໄດ້ເລີ່ມດ້ວຍການບັນຍາຍຂໍ້ພະຄຳພີຂໍ້ນັ້ນ, ໂດຍໃຊ້ຄຳສັບທີ່ເຂົາຈະເຂົ້າໃຈ. ຢູ່ຂ້າງລຸ່ມນີ້ ຄືຕົວຢ່າງການແນະນຳພະຄຳພີ:

- "ໃນປະຫວັດຂອງ ໂຈເຊັບ ສະມິດ ນີ້, ເຮົາມີຄຳຂອງໂຈເຊັບທີ່ກ່າວເຖິງສິ່ງທີ່ໄດ້ເກີດຂຶ້ນກັບເພິ່ນ ເມື່ອເພິ່ນໄດ້ເຂົ້າໄປອະທິຖານຢູ່ໃນປ່າ. ເພິ່ນໄດ້ກ່າວວ່າ, 'ຂ້າພະເຈົ້າໄດ້ເຫັນແສງເປັນເສົາລົງມາ . . .' "
- "ໃນຂໍ້ນີ້ ສາດສະດາ ແອລະມາ ກຳລັງສອນຄົນທີ່ຍາກຈົນໃຫ້ໃຊ້ສັດທາຂອງເຂົາ ໃນພະຄຳຂອງພະອົງ. ເພິ່ນໄດ້ປຽບທຽບພະຄຳຂອງພະເຈົ້າໃສ່ກັບເມັດພືດ ທີ່ສາມາດປູກໄວ້ໃນຈິດໃຈຂອງເຮົາ. ຂໍໃຫ້ທ່ານເລີ່ມອ່ານຈາກຂໍ້ . . ."

**ອ່ານຂໍ້ພະຄຳພີ.** ໃຫ້ອ່ານຂໍ້ພະຄຳພີອອກສຽງ ຫລື ເຊີນໃຫ້ຜູ້ສົນໃຈອ່ານອອກສຽງ. ໃຫ້ເຫັນໃຈຜູ້ທີ່ອ່ານບໍ່ໄດ້ດີ. ຖ້າຫາກຂໍ້ພະຄຳພີນັ້ນຍາກທີ່ຈະເຂົ້າໃຈສຳລັບເຂົາ, ໃຫ້ອ່ານນຳເຂົາຢ່າງລະມັດລະວັງ ແລະ ຊ່ອຍເຂົາໃຫ້ເຂົ້າໃຈຈຸດທີ່ຍາກ ຫລື ໃຫ້ເຂົາອ່ານຂໍ້ທີ່ງ່າຍກວ່ານັ້ນ. ທ່ານອາດຈະຕ້ອງໄດ້ອະທິບາຍຄຳສັບ ຫລື ກຸ່ມຄຳສັບທີ່ຍາກ:

- "ກໍໃຫ້ຄົນນັ້ນຂໍຈາກພະເຈົ້າ ຜູ້ທີ່ຈະໂຜດໃຫ້ແກ່ຕົນ ເພາະພະເຈົ້າໂຜດໃຫ້ແກ່ທຸກຄົນດ້ວຍໃຈກວ້າງຂວາງ ແລະ ດ້ວຍໃຈກະລຸນາ " (ຢາໂກໂບ 1:5).

ພະຄຳພີບາງຂໍ້ກໍຊັດເຈນ ແລະ ບໍ່ຕ້ອງການຄຳອະທິບາຍ. ແຕ່ບາງຂໍ້ທ່ານອາດຈະຕ້ອງໄດ້ໃຊ້ເວລາອະທິບາຍສິ່ງທີ່ໄດ້ອ່ານໄປນັ້ນ.

**ນຳໃຊ້ຂໍ້ພະຄຳພີ.** "ປຽບທຽບ" ພະຄຳພີກັບຕົວທ່ານເອງ ແລະ ກັບຜູ້ສົນໃຈໂດຍການສະແດງໃຫ້ເຫັນວ່າ ຫລັກທຳເຫລົ່ານັ້ນກ່ຽວຂ້ອງກັບປະຈຸບັນແນວໃດ (see 1 Nephi 19:23). ສະແດງໃຫ້ຜູ້ສົນໃຈເຫັນວິທີທີ່ເຂົາຈະນຳໃຊ້ຫລັກທຳໃນຊີວິດຂອງເຂົາແນວໃດ. ເມື່ອເຂົາເຮັດແບບນີ້, ເຂົາຈະຮູ້ວ່າຄຳສອນນັ້ນເປັນຄວາມຈິງ. ໃຫ້ກ່າວປະຈັກພະຍານຂອງທ່ານເຖິງຫລັກທຳ, ແລະ ສັນຍາວ່າ ເຂົາຈະໄດ້ຮັບພອນ. ຕົວຢ່າງເຊັ່ນ:

- "ເໝືອນກັນກັບພວກເຈົ້າ, ຄົນຂອງແອລະມາໄດ້ມີພາລະໜັກ, ເກືອບຫລາຍກວ່າເຂົາຈະອົດທົນໄດ້. ແຕ່ເມື່ອເຂົາໃຊ້ສັດທາ ແລະ 'ຮ້ອງທູນພະເຈົ້າ,' ພະອົງໄດ້ເຮັດໃຫ້ເຂົາເຂັ້ມແຂງຂຶ້ນ ເພື່ອວ່າເຂົາຈະສາມາດອົດທົນກັບຄວາມຫຍຸ້ງຍາກນັ້ນໄດ້ ແລະ ໃຫ້ເຂົາພົ້ນຈາກການທົດລອງຂອງເຂົາ. ດັ່ງທີ່ພະອົງໄດ້ເຮັດກັບຄົນເຫລົ່ານີ້, ເຮົາຮູ້ວ່າ ພະເຈົ້າຈະຊ່ອຍທ່ານໃນການທົດລອງຂອງທ່ານ ເມື່ອທ່ານ . . ."
- "ຄຳສອນຂອງແອລະມາຕໍ່ຄົນຢູ່ນ້ຳຂອງມໍມອນກໍກ່ຽວພັນກັບເຮົາໃນປະຈຸບັນຄືກັນ. ຈອນ, ເຈົ້າຈະເຕັມໃຈ . . ."

ຄົນທີ່ທ່ານສອນຈະແຕກຕ່າງກັນໄປໃນການມອງຂໍ້ຄວາມທີ່ສັກສິດເຫລົ່ານີ້, ຈະຂຶ້ນກັບວ່າເຂົາຮູ້ຈັກພະຄຳພີໄບເບິນຫລາຍປານໃດ, ເຂົາເຂົ້າໃຈພາສາຂອງພະຄຳພີຫລາຍປານໃດ, ແລະ ເຂົາເຊື່ອແນ່ວ່າພະຄຳພີໄບເບິນເປັນພະຄຳຂອງພະເຈົ້າຫລາຍປານໃດ. ຈົ່ງຊ່ອຍຜູ້ສົນໃຈທຸກຄົນໃຫ້ຮູ້ບຸນຄຸນຕໍ່ພະຄຳພີ. ດ້ວຍການໃຊ້ພະຄຳພີຢ່າງມີຜົນດີໃນການສອນຂອງທ່ານ, ທ່ານຈະສາມາດຊ່ອຍຜູ້ສົນໃຈໃຫ້ເລີ່ມສຶກສາພະຄຳພີດ້ວຍຕົນເອງ. ຫລັງຈາກການປ້ຽມຢາມແຕ່ລະຄັ້ງ, ໃຫ້ແນະນຳບົດໃດບົດໜຶ່ງ ຫລື ຂໍ້ໃດຂໍ້ໜຶ່ງ ສຳລັບເຂົາເພື່ອອ່ານ. ທ່ານອາດຈະເອົາຄຳຖາມໃຫ້ເຂົາເພື່ອໄຕ່ຕອງ ໃນເວລາເຂົາອ່ານ, ເຊິ່ງທ່ານຈະສົນທະນາໃນການນັດພົບເທື່ອໜ້າ. ສິ່ງນີ້ຈະຊຸກຍູ້ເຂົາໃຫ້ສຶກສາພະຄຳພີທຸກວັນໃນບ້ານເຮືອນຂອງເຂົາ ແລະ ມີສ່ວນຮ່ວມໃນຫ້ອງຮຽນຢູ່ໂບດ ແລະ ໃນຫ້ອງຮຽນບ່ອນທີ່ພະຄຳພີຖືກໃຊ້.

### ການມອງພະຄຳພີ

ສາດສະໜາສ່ວນຫລາຍຈະມີໜັງສືທີ່ສັກສິດ ຫລື ປື້ມພະຄຳພີ, ແຕ່ການໃຊ້ ຫລື ຄວາມເຂົ້າໃຈຂອງເຂົາອາດຈະແຕກຕ່າງຈາກຄວາມເຂົ້າໃຈຂອງສະມາຊິກຂອງສາດສະໜາຈັກ. ຕົວຢ່າງເຊັ່ນ, ທ່ານອາດຈະຕ້ອງອະທິບາຍວ່າການຂີດໝາຍຂໍ້ພະຄຳພີຂອງທ່ານ ເປັນຫລັກຖານເຖິງຄວາມປາດຖະໜາຂອງທ່ານທີ່ຈະເຂົ້າໃຈ ແລະ ນຳໃຊ້ຄຳສອນຂອງພະຄຳພີ ແລະ ບໍ່ແມ່ນເຄື່ອງໝາຍຂອງການຂາດຄວາມເຄົາລົບນັບຖື. ຊ່ອຍຜູ້ທີ່ທ່ານສອນໃຫ້ເຂົ້າໃຈວ່າ ພະຄຳພີທັງສີ່ເຫລັ້ມແມ່ນສຳຄັນຫລາຍ ເພາະມັນບັນຈຸພະຄຳຂອງພະຜູ້ເປັນເຈົ້າ ຕາມທີ່ສາດສະດາຂອງພະເຈົ້າໄດ້ຂຽນໄວ້ ແລະ ວ່າເຮົາໄດ້ຍອມຮັບມັນວ່າເປັນຄຳຈິງ.

ໝາຍເຫດ

### ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ

**ໃຫ້ທົບທວນຂໍ້ໜຶ່ງດັ່ງຕໍ່ໄປນີ້. ໃຫ້ຕັດສິນໃຈວິທີທີ່ທ່ານຈະ:**

- ແນະນຳພະຄຳພີ.
- ເລົ່າປະຫວັດ ແລະ ເນື້ອໃນຂອງຂໍ້ພະຄຳພີ.
- ອ່ານຂໍ້ພະຄຳພີ ແລະ ອະທິບາຍຄວາມໝາຍຂອງມັນ.
- ອະທິບາຍຄຳສັບທີ່ຍາກ.
- ຊ່ອຍຜູ້ສົນໃຈໃຫ້ນຳເອົາມັນໄປໃຊ້ໃນຊີວິດຂອງເຂົາ.

ໜ້າຫົວເລື່ອງຂອງພະຄຳພີມໍມອນ; 3 ນີໄຟ 11; ໂມໂລໄນ 10:3–8; ໂຢຮັນ 17:3; ໂລມ 8:16–17; 1 ໂກລິນໂທ 15:29; ຢາໂກໂບ 1:5; 1 ເປໂຕ 3:19–20; ອາໂມດ 3:7

### ການສຶກສາພະຄຳພີ

**ເປັນຫຍັງມັນຈຶ່ງສຳຄັນທີ່ຈະສອນຈາກພະຄຳພີ?**

1 Nephi 19:23
D&C 20:7–12
2 ຕີໂມທີ 3:15–17
2 ນີໄຟ 4:15–16

## ສອນເພື່ອຄວາມເຂົ້າໃຈ

> *"ມັນເປັນຄວາມຫລາດຫລັກແຫລມແທ້ໆ ທີ່ຄົນໜຶ່ງໄດ້ເອົາເລື່ອງທີ່ລຶກລັບ ແລະ ຍິ່ງໃຫຍ່ດ້ວຍຕົວມັນເອງ ແລະ ເປີດມັນອອກ ແລະ ເຮັດໃຫ້ມັນງ່າຍຂຶ້ນເພື່ອເດັກນ້ອຍຈະເຂົ້າໃຈມັນໄດ້."*
>
> – ປະທານ ຈອນ ເທເລີ
>
> *THE GOSPEL KINGDOM*, SEL. G. HOMER DURHAM (1943), 270

ຄົນຈະເຊື່ອຂ່າວສານການຟື້ນຟູຂອງພະກິດຕິຄຸນຫລາຍຂຶ້ນ ເມື່ອເຂົາເຂົ້າໃຈຂ່າວສານ. ປະທານ ເຈມ ອີ ຟາວ ໄດ້ກ່າວວ່າ, "ໃຫ້ສຶກສາ, ໄຕ່ຕອງ ແລະ ສອນຈາກພະຄຳພີ, ໂດຍສະເພາະຈາກພະຄຳພີມໍມອນ ແລະ ພະຄຳພີໃໝ່. ໃຫ້ຮູ້ຄວາມຈິງຢ່າງຖັກແໜ່ ເພື່ອທ່ານຈະສາມາດກ່າວມັນອອກມາຢ່າງຊັດເຈນ. ບີ ເອັດ ໂລເບີດ ໄດ້ຂຽນ ໄວ້ວ່າ, 'ເພື່ອຄົນຈະຮູ້ເລື່ອງລາວ, ຈະຕ້ອງຖະແຫລງຄວາມຈິງນັ້ນອອກມາ ແລະ ຖ້າຫາກຄຳຖະແຫລງນັ້ນຊັດເຈນ ແລະ ຄົບຖ້ວນຫລາຍຂະໜາດໃດ, ໂອກາດສຳລັບພະວິນຍານບໍລິສຸດຍິ່ງຈະດີຫລາຍຂະໜາດນັ້ນ ເພື່ອຈະໄດ້ຢັ້ງຢືນຕໍ່ຈິດວິນຍານຂອງມະນຸດວ່າ ວຽກງານນີ້ຈິງ.' [*New Witnesses for God*, 3 vols. (1909), 2:vii. ທ່ານຈະບໍ່ສາມາດເຮັດໃຫ້ຄົນເຫລື້ອມໃສໄດ້ ຖ້າຫາກທ່ານບໍ່ເຫລື້ອມໃສເສຍກ່ອນ." ("What I Want My Son to Know before He Leaves on His Mission," *Ensign*, May 1996, 41).

ທ່ານຖືກບັນຊາໃຫ້ໄຕ່ຕອງ ແລະ ອະທິບາຍຂໍ້ພະຄຳພີຢ່າງລະອຽດເມື່ອທ່ານສອນ (see D&C 68:1). ການອະທິບາຍຢ່າງລະອຽດໝາຍຄວາມວ່າ ຂະຫຍາຍຕື່ມ ແລະ ອະທິບາຍໃຫ້ຊັດເຈນ. ການອະທິບາຍພະກິດຕິຄຸນຢ່າງລະອຽດໝາຍຄວາມວ່າ ທ່ານອະທິບາຍຄວາມໝາຍຂອງຄຳສອນ ແລະ ຂໍ້ພະຄຳພີແບບງ່າຍໆ ແລະ ຊັດເຈນ, ອາໄສພະວິນຍານໃຫ້ນຳພາທ່ານໃນສິ່ງທີ່ທ່ານເວົ້າ. ທ່ານຕ້ອງໃຊ້ຄຳທີ່ສຸພາບ ແຕ່ເປັນຄຳທີ່ຈະຊ່ອຍຄົນໃຫ້ເຂົ້າໃຈຫລັກທຳຄຳສອນ. ທ່ານຖາມຄຳຖາມທີ່ຈະຊ່ອຍເຂົາໃຫ້ຄິດເຖິງຫລັກທຳ ແລະ ເພື່ອເບິ່ງວ່າເຂົາເຂົ້າໃຈ ແລະ ຍອມຮັບສິ່ງທີ່ທ່ານໄດ້ສອນຫລືບໍ່.

ໃນທ້າຍແຕ່ລະບົດຮຽນທັງສາມບົດທຳອິດ ໃນບົດທີ 3 ມີຄຳສັບຈຳນວນໜຶ່ງ ທີ່ຄົນທີ່ທ່ານສອນອາດບໍ່ເຄີຍເຫັນມາກ່ອນ. ສ່ວນໜຶ່ງໃນການສອນເພື່ອຄວາມເຂົ້າໃຈຄື ທ່ານຄວນອະທິບາຍຄຳສັບ, ກຸ່ມຄຳສັບ, ແລະ ແນວຄິດຕ່າງໆ ເພື່ອຜູ້ອື່ນຈະເຂົ້າໃຈທ່ານດີຂຶ້ນ. ທ່ານສາມາດພັດທະນາຄວາມສາມາດທີ່ຈະອະທິບາຍພະກິດຕິຄຸນໄດ້ໂດຍ:

- ການເຂົ້າໃຈຄຳສັບທີ່ທ່ານໃຊ້.

ໝາຍເຫດ

- ແປຄວາມໝາຍຄຳສັບທີ່ຜູ້ອື່ນອາດຈະບໍ່ເຂົ້າໃຈ. ກໍມີຫລາຍຄຳທີ່ມີຄວາມໝາຍພິເສດສຳລັບສະມາຊິກໃນສາດສະໜາຈັກ ໄດ້ຖືກແປແບບງ່າຍໆ ໃນ Guide to the Scriptures ແລະ ໃນ *True to the Faith* ນຳອີກ.
- ການຖາມຄືນໃນຄຳຖາມເຊັ່ນ, "ທ່ານຮູ້ບໍວ່າພວກເຮົາໝາຍເຖິງຫຍັງ ເມື່ອພວກເຮົາເວົ້າວ່າ . . . ?" ຫລື "ທ່ານອະທິບາຍສິ່ງທີ່ພວກເຮົາໄດ້ເວົ້າມາໃນຄຳຂອງທ່ານເອງໄດ້ບໍ?"

ເມື່ອທ່ານສຶກສາຄຳສອນໃນບົດທີ 3, ໃຫ້ຊີ້ບອກຄຳສັບທີ່ທ່ານຄິດວ່າຜູ້ສົນໃຈ ຈະເຂົ້າໃຈຍາກ. ເມື່ອທ່ານສອນຄຳສອນໃນບົດທີ 3, ໃຫ້ຈົດຄຳສັບ, ກຸ່ມຄຳສັບ, ແລະ ແນວຄິດທີ່ຜູ້ສົນໃຈຈະເຂົ້າໃຈຍາກ. ໃຫ້ໃຊ້ແຫລ່ງທີ່ໄດ້ກ່າວເຖິງໃນຂ້າງເທິງເພື່ອແປຄຳສັບເຫລົ່ານັ້ນ. ໃຫ້ລອງໃຊ້ຄຳແປຂອງທ່ານກັບຜູ້ສົນໃຈ ແລະ ສະມາຊິກໃໝ່.

## ການສຶກສາພະຄຳພີ

**ເປັນຫຍັງເຮົາຈຶ່ງໃຫ້ລາຍລະອຽດ ຫລື ອະທິບາຍຄຳສອນຢ່າງລະມັດລະວັງ?**

Mosiah 8:3 | ແອລະມາ 12:1 | D&C 68:1–5
Mosiah 27:35 | 3 ນີໄຟ 26:1 | D&C 71:1

**ພວກເຮົາຮຽນຮູ້ວິທີໃດ? ເປັນຫຍັງມັນຈຶ່ງສຳຄັນທີ່ຈະໄຂ ຫລື ເປີດເຜີຍລາຍລະອຽດເທື່ອລະເລັກລະນ້ອຍ?**

2 Nephi 28:30 | ໂມໄຊຢາ 2:9 | D&C 98:11–12
Jacob 4:13

**ເປັນຫຍັງຄວາມຊັດແຈ້ງຈຶ່ງສຳຄັນ?**

2 Nephi 25:4, 7, 28 | Alma 13:23 | ເນເຫມີຢາ 8:8
2 ນີໄຟ 32:7

**ພະຜູ້ເປັນເຈົ້າຕິດຕໍ່ກັບລູກໆຂອງພະອົງໃນວິທີໃດ?**

2 ນີໄຟ 31:3 | D&C 1:24

## ໃຫ້ຖາມຄຳຖາມ



ພະເຢຊູໄດ້ຖາມຄຳຖາມເລື້ອຍໆເພື່ອຊ່ອຍຄົນໃຫ້ໄຕ່ຕອງ ແລະ ນຳເອົາຫລັກທຳໄປໃຊ້. ຄຳຖາມຂອງພະອົງໄດ້ກະຕຸ້ນຄວາມຄິດ, ການສະແຫວງຫາທາງຈິດວິນຍານ, ແລະ ຄຳໝັ້ນສັນຍາ.

ຄຳຖາມທີ່ດີຈະຊ່ອຍທ່ານໃຫ້ເຂົ້າໃຈຄວາມສົນໃຈ, ຄວາມຫ່ວງໃຍ, ຫລື ຄຳຖາມອື່ນໆທີ່ຜູ້ອື່ນມີ. ມັນຈະເຮັດໃຫ້ການສອນຂອງທ່ານດີຂຶ້ນ, ເຊື້ອເຊີນພະວິນຍານ, ແລະ ຊ່ອຍຜູ້ສົນໃຈຂອງທ່ານໃຫ້ຮຽນຮູ້.

ຄຳຖາມທີ່ບໍ່ດີ ຈະເຮັດໃຫ້ຜູ້ສົນໃຈຢ້ານ, ງຶດງົງ ຫລື ຜິດໃຈ. ມັນຈະເຮັດໃຫ້ທ່ານຄວບຄຸມສະພາບການສອນບໍ່ໄດ້. ໃຫ້ພະຍາຍາມຖາມຄຳຖາມທີ່:

- ງ່າຍໆ ແລະ ເຂົ້າໃຈງ່າຍ.
- ຊ່ອຍຄົນໃຫ້ຄິດກ່ຽວກັບສິ່ງທີ່ທ່ານກຳລັງສອນ.

ໝາຍເຫດ

- ຊ່ອຍທ່ານໃຫ້ຕັດສິນໃຈວ່າ ຜູ້ສົນໃຈເຂົ້າໃຈສິ່ງທີ່ທ່ານກຳລັງສອນໄດ້ດີປານໃດ?
- ຊ່ອຍຄົນໃຫ້ນຳສິ່ງທີ່ເຂົາຮຽນຮູ້ໄປໃຊ້.

ເມື່ອຜູ້ທີ່ທ່ານສອນຕອບຄຳຖາມເຫລົ່ານີ້, ເຂົາຈະຮູ້ສຶກວ່າ ເຂົາສາມາດເວົ້າອອກມາຢ່າງເປີດເຜີຍ. ຄຳຖາມທີ່ດີຈະນຳຜູ້ສົນໃຈໃຫ້ຖາມທ່ານເມື່ອເຂົາບໍ່ເຂົ້າໃຈ, ເມື່ອເຂົາມີຄວາມຫ່ວງໄຍ, ຫລື ເມື່ອເຂົາຢາກຮູ້ວ່າ ຈະເຮັດແບບໃດ. ຄຳຖາມທີ່ດີສາມາດຊ່ອຍຜູ້ທີ່ທ່ານສອນແບ່ງປັນຄວາມຮູ້ສຶກຂອງເຂົາ ແລະ ໂດຍການເຮັດສິ່ງນີ້ ຈະພົບປະຈັກພະຍານທີ່ກຳລັງເຕີບໂຕຂຶ້ນ. ຕົວຢ່າງຂອງຄຳຖາມທີ່ໄດ້ຜົນດີຮ່ວມທັງ:

- ທ່ານມີຄຳຖາມອັນໃດແດ່ກ່ຽວກັບສິ່ງທີ່ພວກເຮົາໄດ້ສອນ?
- ທ່ານເຊື່ອວ່າພະບິດາເທິງສະຫວັນຮັກທ່ານບໍ? ເປັນຫຍັງ?
- ບາງເທື່ອເຮົາກໍເຮັດຜິດຄືກັນກັບຄົນໃນເລື່ອງນີ້ແນວໃດ?

ເພື່ອຈະຊ່ອຍຜູ້ທີ່ທ່ານສອນໃຫ້ຕຽມຕອບຄຳຖາມ, ທ່ານອາດຈະເວົ້າວ່າ, "ຕອນເຮົາອະທິບາຍຄວາມສຳຄັນໃນການຮັກສາວັນຊະບາໂຕໃຫ້ສັກສິດ, ໃຫ້ທ່ານຖາມຕົວເອງວ່າ, 'ພະບັນຍັດຂໍ້ນີ້ມີຄວາມໝາຍແນວໃດສຳລັບເຮົາ?' "
ໃຫ້ຫລີກລ້ຽງຈາກການຖາມຄຳຖາມທີ່:

- ຮ່ວມກັນຫລາຍກວ່າແນວຄິດດຽວ.
- ກ່ຽວກັບຄຳສອນທີ່ທ່ານຍັງບໍ່ທັນໄດ້ສອນເທື່ອ.
- ບໍ່ມີຈຸດປະສົງທີ່ຊັດເຈນ.
- ສອບສວນ ແລະ ສອດຮູ້ສອດເຫັນແບບບໍ່ຈຳເປັນ.

ການຖາມຄຳຖາມຫລາຍເກີນໄປ, ໂດຍສະເພາະໃນການຢ້ຽມຢາມຄັ້ງທຳອິດ, ຈະເຮັດໃຫ້ເຫັນວ່າທ່ານກຳລັງທຳ "ການສອບສວນ." ບໍ່ຕ້ອງຖາມຜູ້ສົນໃຈໃຫ້ບອກຄຳຕອບໃດໜຶ່ງກ່ຽວກັບສິ່ງທີ່ບໍ່ສຳຄັນ ຫລື ສິ່ງທີ່ເຫັນໄດ້ງ່າຍ. ການເຮັດສິ່ງນີ້ຈະປ່ຽນສະພາບສອນທີ່ດີໄປເປັນເກມແບບເວົ້າເດົາ. ເມື່ອທ່ານຕ້ອງການຄຳຕອບໃດໜຶ່ງ, ມັນຈະເປັນການດີ ຖ້າທ່ານຈະຖາມຄຳຖາມທີ່ກ່ຽວກັບຄວາມເປັນຈິງ ຫລື ໃຫ້ສະເໜີຂໍ້ມູນໃນວິທີທາງອື່ນ. ໃຫ້ຫລີກເວັ້ນຈາກການຖາມຄຳຖາມທີ່ຈະເຮັດໃຫ້ຜູ້ໃດຜູ້ໜຶ່ງອັບອາຍ ຖ້າຫາກເຂົາບໍ່ຮູ້ຄຳຕອບ. ຄຳຖາມຈະມີປະໂຫຍດດີຖ້າຫາກຖືກຖາມ ຫລັງຈາກທ່ານໄດ້ສອນ ແລະ ໄດ້ສະແດງປະຈັກພະຍານຕໍ່ຫລັກທຳທີ່ສຳຄັນນັ້ນແລ້ວ. ຕໍ່ໄປນີ້ແມ່ນຕົວຢ່າງຂອງຄຳຖາມ ທີ່ບໍ່ໄດ້ຜົນດີປານໃດ:

- ໃຜເປັນສາດສະດາຄົນທຳອິດ? (ຖາມກ່ອນການສອນກ່ຽວກັບຍຸກສະໄໝ.)
- ການຮັກສາຮ່າງກາຍຂອງເຮົາໃຫ້ບໍລິສຸດຈະຊ່ອຍເຮົາໃຫ້ມີພະວິນຍານມາສະຖິດຢູ່ນຳ ແລະ ສະແດງວ່າເຮົາເຕັມໃຈທີ່ຈະເຮັດຕາມສາດສະດາຂອງພະເຈົ້າໄດ້ແນວໃດ? (ຫລາຍກວ່າໜຶ່ງແນວຄິດ.)
- ມັນສຳຄັນບໍທີ່ຈະຮູ້ກ່ຽວກັບພະບັນຍັດຂອງພະເຈົ້າ? (ເປັນຄຳຖາມທີ່ຕອບຄຳດຽວວ່າ ແມ່ນ ຫລື ບໍ່ແມ່ນ ແລະເຫັນໄດ້ງ່າຍໂພດ.)
- ທ່ານຮູ້ສຶກແນວໃດຕໍ່ພະຄຳພີມໍມອນ? (ກ່ອນເຂົາໄດ້ອ່ານມັນ.)
- ເຮົາສາມາດເຮັດຫຍັງແດ່ທຸກໆມື້ ທີ່ຈະຊ່ອຍໃຫ້ເຮົາຮູ້ສຶກໃກ້ຊິດພະເຈົ້າ? (ຄຳຖາມແບບບໍ່ຊັດເຈນ ທີ່ຊອກຫາຄຳຕອບໂດຍສະເພາະ: ການອະທິຖານ.)
- ໃຜເປັນສາດສະດາຫລັງຈາກໂນອາ? (ຖາມໃຫ້ເຂົາເດົາ.)

ໝາຍເຫດ

ໃຫ້ຮຽນຖາມຄຳຖາມເມື່ອພະວິນຍານບໍລິສຸດໄດ້ກະຕຸ້ນ. ຄຳຖາມທີ່ເໝາະສົມທີ່ໄດ້ຖາມໃນເວລາທີ່ເໝາະສົມຈະຊ່ອຍຜູ້ທີ່ທ່ານສອນໃຫ້ຮຽນຮູ້ພະກິດຕິຄຸນ ແລະ ຮູ້ສຶກເຖິງພະວິນຍານ. ເໝືອນກັນ, ຄຳຖາມທີ່ບໍ່ເໝາະສົມທີ່ຖາມໃນເວລາທີ່ບໍ່ເໝາະສົມ ຈະລົບກວນການຮຽນຮູ້ຂອງເຂົາ. ການຖາມຄຳຖາມທີ່ເໝາະສົມໃນເວລາທີ່ເໝາະສົມ ຈະຕ້ອງມີພະວິນຍານສະຖິດຢູ່ນຳ, ເພື່ອທ່ານຈະຟັງຜູ້ທີ່ທ່ານກຳລັງສອນ, ແລະ ເພື່ອທ່ານຈະເອົາໃຈໃສ່ກັບການສອນຂອງທ່ານ. ການສອນທີ່ໄດ້ຜົນດີຈະເປັນວຽກທີ່ຍາກ ແລະ ທ່ານກັບຄູ່ສອນສາດສະໜາຂອງທ່ານຈະຕ້ອງມີຄວາມຕັ້ງໃຈ ແລະ ຄວາມພະຍາຍາມ.



© 1985 Robert T. Barrett. ຫ້າມລອກແບບ.

### ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ

ຈະມີຫຍັງເກີດຂຶ້ນຕໍ່ຄວາມກ້າວໜ້າຂອງຜູ້ສົນໃຈ ຖ້າຫາກເຂົາປະເຊີນກັບສະພາບການດັ່ງຕໍ່ໄປນີ້ ແລະ ທ່ານບໍ່ຮູ້ເລື່ອງເຫລົ່ານີ້?

- ຜູ້ເຮັດວຽກຢູ່ບ່ອນທຳງານມັກຈະຫົວຂວັນສິ່ງທີ່ກ່ຽວກັບທາງວິນຍານ.
- ບາງຄົນໃນຄອບຄົວເປັນສະມາຊິກທີ່ເຂັ້ມແຂງໃນສາດສະໜາອື່ນ.
- ໝູ່ເພື່ອນທີ່ເຊື່ອວ່າ ຄົນມໍມອນບໍ່ໄດ້ເປັນສາດສະໜາທີ່ເຊື່ອໃນພະຄິດ.
- ມີປະສົບການທາງວິນຍານໃນການອ່ານຈາກພະຄຳພີມໍມອນ.

ໃຫ້ຄິດກ່ຽວກັບຄຳຖາມທີ່ທ່ານຄວນຈະຖາມ ເພື່ອຈະຮຽນຮູ້ເຖິງແຕ່ລະສະພາບການທີ່ກ່າວມານັ້ນໃຫ້ດີຂຶ້ນກວ່າເກົ່າ. ໃຫ້ຂຽນຄຳຖາມໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ. ໃຫ້ສົນທະນາກັບຄູ່ສອນສາດສະໜາຂອງທ່ານ ເຖິງວິທີທີ່ທ່ານຈະສາມາດປັບປຸງຄຳຖາມ ທີ່ທ່ານໄດ້ຂຽນໄວ້ສຳລັບກິດຈະກຳນີ້.

## ຈົ່ງຟັງ

ເມື່ອທ່ານຕັ້ງໃຈຟັງຜູ້ອື່ນເວົ້າ, ທ່ານຈະເຂົ້າໃຈເຂົາດີຂຶ້ນ. ເມື່ອເຂົາຮູ້ວ່າຄວາມຄິດ ແລະ ຄວາມຮູ້ສຶກຂອງເຂົາສຳຄັນຕໍ່ທ່ານ, ເຂົາຈະຍອມຮັບຄຳສອນຂອງທ່ານດີຂຶ້ນ, ເຂົາຈະແບ່ງປັນປະສົບການສ່ວນຕົວ, ແລະ ເຮັດຄຳໝັ້ນສັນຍາ. ເມື່ອທ່ານຟັງ, ທ່ານຈະສາມາດປັບການສອນຂອງທ່ານໃຫ້ເຂົ້າກັບຄວາມຕ້ອງການ ແລະ ຄວາມສົນໃຈຂອງເຂົາໄດ້ດີກວ່າເກົ່າ.

ພິເສດແລ້ວໃຫ້ຟັງການກະຊິບຈາກພະວິນຍານ. ເມື່ອຜູ້ອື່ນແບ່ງປັນຄວາມຮູ້ສຶກຂອງເຂົາກັບທ່ານ, ຄວາມຄິດ ຫລື ແນວຄິດຈະເຂົ້າມາສູ່ຈິດໃຈຂອງທ່ານຕາມທີ່ພະວິນຍານໄດ້ນຳພາມາ. ພ້ອມນີ້ ທ່ານຈະສາມາດເຂົ້າໃຈດີຂຶ້ນເຖິງສິ່ງທີ່ຜູ້ອື່ນພະຍາຍາມເວົ້າອອກມາ.

ເມື່ອຄົນອື່ນເວົ້າກັບທ່ານ, ໃຫ້ຫລີກເວັ້ນຈາກການຄິດຫາສິ່ງທີ່ທ່ານຈະເວົ້າຕອບ. ໃຫ້ຕັ້ງໃຈຟັງຜູ້ທີ່ກຳລັງເວົ້າ ແທນທີ່ຈະຄິດຫາຄຳຕອບ. ແອວເດີ ແຈຟະລີ ອາ ຮໍແລນ ໄດ້ສອນວ່າ: “ສຳຄັນກວ່າການເວົ້າແມ່ນການຟັງ. ຄົນເຫລົ່ານີ້ບໍ່ແມ່ນສິ່ງຂອງທີ່ບໍ່ມີຊີວິດຊີວາ ຫລື ເປັນພຽງຕົວເລກໃຫ້ການບັບຕິດສະມາເທົ່ານັ້ນ. ເຂົາເປັນລູກຂອງພະເຈົ້າ, ເປັນອ້າຍເອື້ອຍນ້ອງຂອງເຮົາ, ແລະ ເຂົາຕ້ອງການສິ່ງທີ່ເຮົາມີ. ໃຫ້ຈິງໃຈ. ໃຫ້ປະຕິບັດກັບເຂົາດ້ວຍຄວາມຈິງໃຈ. ໃຫ້ຖາມໝູ່ເພື່ອນເຫລົ່ານີ້ວ່າແມ່ນຫຍັງເປັນສິ່ງສຳຄັນທີ່ສຸດຕໍ່ *ເຂົາ*. *ເຂົາ* ທະນຸຖະໜອມສິ່ງໃດ, ແລະ *ເຂົາ* ຖືຫຍັງເປັນສິ່ງທີ່ລ້ຳຄ່າ? ແລ້ວໃຫ້ຟັງ. ຫາກສະພາບການເໝາະສົມ, ທ່ານສາມາດຖາມວ່າ ແມ່ນຫຍັງເປັນຄວາມຢ້ານກົວຂອງເຂົາ, ແມ່ນຫຍັງເປັນສິ່ງທີ່ເຂົາໄຝ່ຝັນຫາ, ຫລື ແມ່ນຫຍັງເປັນສິ່ງທີ່ເຂົາຮູ້ສຶກວ່າຂາດໃນຊີວິດຂອງເຂົາ. ຂ້າພະເຈົ້າສັນຍາກັບທ່ານວ່າ *ບາງສິ່ງບາງຢ່າງ* ໃນສິ່ງທີ່ເຂົາເວົ້າຈະເນັ້ນໜັກເຖິງຄວາມຈິງຂອງພະກິດຕິຄຸນກ່ຽວກັບສິ່ງທີ່ທ່ານສາມາດສະແດງປະຈັກພະຍານຕໍ່ ແລະ ກ່ຽວກັບສິ່ງທີ່ທ່ານສາມາດສອນຕື່ມ. . . . ຖ້າຫາກເຮົາຟັງດ້ວຍຄວາມຮັກ, ເຮົາບໍ່ຕ້ອງຄິດວ່າ ຈະເວົ້າຫຍັງ. ມັນຈະຖືກມອບໃຫ້ເຮົາ—ໂດຍພະວິນຍານ ແລະ ໂດຍໝູ່ເພື່ອນຂອງເຮົາ” (“Witnesses Unto Me,” *Ensign*, May 2001, 15; italics in original).

ໝາຍເຫດ

ພ້ອມນີ້ ຜູ້ຄົນຈະສົນທະນາດ້ວຍວິທີທີ່ເຂົານັ່ງ, ການສະແດງຕາມໃບໜ້າ, ສິ່ງທີ່ເຂົາເຮັດກັບມືຂອງເຂົາ, ລະດັບສຽງຂອງເຂົາ, ແລະ ການເຄື່ອນໄຫວໃນຕາຂອງເຂົາ. ໃຫ້ສັງເກດເບິ່ງຂໍ້ຄວາມທີ່ບໍ່ເວົ້າອອກມານີ້; ມັນຈະຊ່ອຍທ່ານໃຫ້ເຂົ້າໃຈຄວາມຮູ້ສຶກຂອງຄົນທີ່ທ່ານສອນ. ພ້ອມນີ້ໃຫ້ຮູ້ສຶກຕົວກ່ຽວກັບທ່າທີຂອງທ່ານນຳອີກ. ໃຫ້ສົ່ງຂໍ້ຄວາມທີ່ສະແດງອອກເຖິງຄວາມສົນໃຈ ແລະ ຄວາມຕື່ນເຕັ້ນ ໂດຍການຟັງຢ່າງຕັ້ງໃຈ.

ບໍ່ໃຫ້ຢ້ານຄວາມງຽບສະຫງົບ. ຄົນສ່ວນຫລາຍຕ້ອງການເວລາເພື່ອຈະຄິດ ແລະ ຕອບຄຳຖາມ ຫລື ເພື່ອຈະສະແດງສິ່ງທີ່ເຂົາກຳລັງຮູ້ສຶກ. ທ່ານອາດຈະຢຸດຈັກໜ້ອຍຫລັງຈາກທ່ານໄດ້ຖາມຄຳຖາມແລ້ວ, ຫລັງຈາກໄດ້ແບ່ງປັນປະສົບການທາງວິນຍານ, ຫລື ເມື່ອຄົນມີຄວາມຫຍຸ້ງຍາກທີ່ຈະສະແດງຄວາມຮູ້ສຶກຂອງເຂົາ. ໃຫ້ແນ່ໃຈວ່າ ທ່ານໃຫ້ເວລາເຂົາຄິດກ່ອນທ່ານຈະຕອບ, ແລະ ບໍ່ຕ້ອງເວົ້າຕັດຄວາມຂະນະທີ່ເຂົາກຳລັງເວົ້າ.

ເມື່ອທ່ານຮູ້ສຶກວ່າທ່ານເຂົ້າໃຈສິ່ງທີ່ໄດ້ເວົ້າອອກແລ້ວ, ໃຫ້ອອກຄວາມເຫັນທີ່ສະແດງວ່າທ່ານເຂົ້າໃຈ, ເຊັ່ນ "ທ່ານໝາຍຄວາມວ່າ ___________. ແມ່ນບໍ?" ຫລື "ຖ້າເຮົາເຂົ້າໃຈຖືກ, ທ່ານຮູ້ສຶກວ່າ ___________." ຖ້າທ່ານບໍ່ແນ່ໃຈວ່າທ່ານເຂົ້າໃຈຫລືບໍ່, ຂໍໃຫ້ຄົນນັ້ນອະທິບາຍຢ່າງແຈ່ມແຈ້ງ.

ບາງຄົນມັກຈະຄວບຄຸມການສົນທະນາ ແລະ ບໍ່ໃຫ້ທ່ານມີໂອກາດສອນພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່. ທ່ານຕ້ອງຮຽນຮູ້ວິທີທີ່ຈະຄວບຄຸມສະພາບການເຊັ່ນນັ້ນ. ຕົວຢ່າງໃຫ້ເວົ້າວ່າ, "ພວກເຮົາຂອບໃຈທີ່ທ່ານບອກເລື່ອງນັ້ນກັບພວກເຮົາ, ແຕ່ນັ້ນເປັນຂໍ້ຄວາມທີ່ພວກເຮົາຢາກຈະສົນທະນາທີຫລັງ. ຂ້ອຍຂໍບອກໃຫ້ຄູ່ສອນຂອງຂ້ອຍຂຽນມັນລົງໄວ້ ເພື່ອພວກເຮົາຈະບໍ່ລືມເອົາມັນມາສົນທະນາໃນຕອນພວກເຮົາມາຢ້ຽມຢາມເທື່ອໜ້າ." ໃຫ້ຈຳໄວ້ວ່າ, ທ່ານຈະສາມາດຊ່ອຍຄົນໄດ້ຫລາຍດ້ວຍການສອນພະກິດຕິຄຸນຂອງພະເຢຊູຄຣິດໃຫ້ເຂົາ.

ເມື່ອທ່ານຕັ້ງໃຈຟັງ, ພະວິນຍານຈະຊ່ອຍທ່ານໃຫ້ຮູ້ຄຳທີ່ຈະເວົ້າ. ການຟັງຈະຕ້ອງໃຊ້ຄວາມພະຍາຍາມ ແລະ ຄວາມຕັ້ງໃຈ. ຜູ້ສອນສາດສະໜາຄົນໜຶ່ງໄດ້ແບ່ງປັນປະສົບການແທ້ຈິງດັ່ງຕໍ່ໄປນີ້ (ນີ້ເປັນຊື່ໃນນາມ):

> *ຄູ່ສອນ ແລະ ຂ້າພະເຈົ້າກຳລັງສອນຄອບຄົວ ຊານເຈດ. ອາກາດກໍຮ້ອນ ແລະ ເດັກນ້ອຍກໍພາກັນເຮັດສຽງຟົດບົນ. ຂ້າພະເຈົ້າໄດ້ຖາມ ຊິດສະເຕີ ຊານເຈດ ກ່ຽວກັບການອ່ານພະຄຳພີມໍມອນຂອງລາວ. ເມື່ອລາວເລີ່ມອະທິບາຍ, ຂ້າພະເຈົ້າສັງເກດເຫັນລູກຊາຍຂອງລາວຈັບເອົາປຶ້ມຂຽນຂອງຄູ່ສອນຂອງຂ້າພະເຈົ້າ ແລະ ແລ່ນອ້ອມຫ້ອງແກວ່ງມັນໄປມາ. ເຖິງແມ່ນວ່າ ຂ້າພະເຈົ້າກຳລັງຫລຽວເບິ່ງ ຊິດສະເຕີ ຊານເຈດ, ແຕ່ຈິດໃຈຂອງຂ້າພະເຈົ້າຢູ່ບ່ອນອື່ນ. ຂ້າພະເຈົ້າໄດ້ຄິດຢູ່ໃນໃຈວ່າ, "ມັນອົບເອົ້າໂພດ, ແລະ ປານໃດລູກຊາຍລາວຈິ່ງຊິສະຫງົບລົງ. ນີ້ເປັນໄປບໍ່ໄດ້." ໃນຂະນະທີ່ຈິດໃຈຂອງຂ້າພະເຈົ້າຄິດໄປແນວອື່ນຢູ່ນັ້ນ, ຂ້າພະເຈົ້າເຫັນ ຊິດສະເຕີ ຊານເຈດ ພະຍາຍາມຈະເວົ້າ. ຄວາມປະທັບໃຈແບບງຽບໆໄດ້ເຂົ້າມາສູ່ຈິດໃຈວ່າໃຫ້ຟັງ. ຂ້າພະເຈົ້າໄດ້ຕໍ່ສູ້ບໍ່ເອົາໃຈໃສ່ກັບຄວາມອົບເອົ້າ ແລະ ສຽງຟົດບົນ. ຂ້າພະເຈົ້າເບິ່ງໃບໜ້າຂອງລາວ ເມື່ອລາວເວົ້າ. ລາວໄດ້ຫລຽວເບິ່ງພື້ນ, ແລ້ວຫລຽວກັບຄືນເບິ່ງຄູ່ສອນ ແລະ ຂ້າພະເຈົ້າ. ສາມີຂອງລາວໄດ້ພະຍາຍາມຊ່ອຍໃຫ້ລູກໆງຽບລົງ. ລາວຢຸດເວົ້າບຶດໜຶ່ງ, ແລ້ວດ້ວຍສຽງທີ່ສັ່ນເຊັນ ລາວໄດ້ເວົ້າວ່າ, "ຂ້ອຍໄດ້ເຮັດຕາມທີ່ພວກເຈົ້າຮ້ອງຂໍ. ຂ້ອຍໄດ້ອ່ານບົດທີ່ພວກເຈົ້າຢາກໃຫ້ຂ້ອຍອ່ານ, ແລະ ຂ້ອຍໄດ້ອະທິຖານ." ອີກເທື່ອໜຶ່ງລາວຢຸດເວົ້າ ແລະ ຫລຽວລົງພື້ນ. ລາວຫລຽວເບິ່ງລູກໆຂອງລາວ, ແລ້ວຕາຂອງລາວສົບກັບຕາຂອງຂ້າພະເຈົ້າ. "ຂ້ອຍໄດ້ຮັບຄຳຕອບແລ້ວ," ລາວໄດ້ເວົ້າດ້ວຍຄວາມຍິ້ມແຍ້ມ ແລະ ດ້ວຍນ້ຳຕາຄາປີ້. "ມັນຈິງ, ຂ້ອຍຮູ້ວ່າມັນຈິງ." ຫ້ອງນັ້ນເຕັມໄປດ້ວຍພະວິນຍານ. ດ້ວຍໃຈທີ່ເຕັມໄປດ້ວຍຄວາມກະຕັນຍູທີ່ຂ້າພະເຈົ້າໄດ້ຟັງ, ຂ້າພະເຈົ້າໄດ້ຍິ້ມ ແລະ ເວົ້າວ່າ, "ແມ່ນແລ້ວ, ມັນຈິງ."*

### ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ

ຫລັງຈາກການທົບທວນເລື່ອງຢູ່ຂ້າງເທິງ, ໃຫ້ຂຽນຄຳຕອບໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ ຕໍ່ຄຳຖາມຢູ່ຂ້າງລຸ່ມ ຫລື ສົນທະນາມັນກັບຄູ່ສອນສາດສະໜາຂອງທ່ານ.

- ອາດຈະມີຫຍັງເກີດຂຶ້ນຖ້າຫາກຜູ້ສອນສາດສະໜາໄດ້ຫ່ວງໄຍນຳຄວາມສະບາຍສ່ວນຕົວຂອງລາວ ຫລື ນຳປຶ້ມຂຽນຂອງຄູ່ສອນສາດສະໜາຂອງລາວ?
- ຜູ້ສົນໃຈຄົນນີ້ໄດ້ຮັບພອນແນວໃດເພາະວ່າຜູ້ສອນສາດສະໜາໄດ້ຟັງ?

ໃຫ້ຕອບຄຳຖາມຂ້າງລຸ່ມ:

| | |
|---|---|
| ກ = ບໍ່ຈິງຈັກເທື່ອສຳລັບຂ້າພະເຈົ້າ | ຄ = ຕາມທຳມະດາກໍຈິງສຳລັບຂ້າພະເຈົ້າ |
| ຂ = ບາງເທື່ອກໍຈິງສຳລັບຂ້າພະເຈົ້າ | ງ = ຈິງຢູ່ຕະຫລອດສຳລັບຂ້າພະເຈົ້າ |

ໝາຍເຫດ

- ເມື່ອຂ້າພະເຈົ້າເວົ້າລົມກັບຜູ້ອື່ນ, ຂ້າພະເຈົ້າຄິດຫາປະສົບການທີ່ຄ້າຍຄືກັນເພື່ອຂ້າພະເຈົ້າຈະໄດ້ແບ່ງປັນແທນທີ່ຈະຕັ້ງໃຈຟັງ.
- ເມື່ອຜູ້ອື່ນເລົ່າຄວາມຮູ້ສຶກຂອງເຂົາໃຫ້ຂ້າພະເຈົ້າຟັງ, ຂ້າພະເຈົ້າໄດ້ສົມມຸດຕົວເອງວ່າເປັນເຂົາ ເພື່ອຈະໄດ້ເຫັນວ່າ ຂ້າພະເຈົ້າຈະຮູ້ສຶກແບບໃດ.
- ເມື່ອຂ້າພະເຈົ້າສອນຜູ້ສົນໃຈ, ຂ້າພະເຈົ້າເປັນຫ່ວງວ່າຂ້າພະເຈົ້າຈະເວົ້າຫຍັງຕໍ່ໄປ.
- ຂ້າພະເຈົ້າງຸດງິດໃຈເມື່ອຜູ້ສົນໃຈເວົ້າຫລາຍໂພດ.
- ຂ້າພະເຈົ້າລຳບາກທີ່ຈະຕິດຕາມ ຫລື ເຂົ້າໃຈສິ່ງທີ່ຜູ້ອື່ນພະຍາຍາມບອກຂ້າພະເຈົ້າ.
- ຄວາມຄິດຂອງຂ້າພະເຈົ້າມັກຄິດໄປທາງອື່ນເມື່ອຄູ່ສອນຂອງຂ້າພະເຈົ້າກຳລັງສອນ.
- ຂ້າພະເຈົ້າໃຈຮ້າຍຖ້າຫາກຜູ້ໃດຜູ້ໜຶ່ງກຳລັງເວົ້ານຳຂ້າພະເຈົ້າ ແລະ ມີຜູ້ອື່ນເວົ້າຕັດຂຶ້ນ ຫລື ລົບກວນຄວາມຕັ້ງໃຈຂອງຂ້າພະເຈົ້າ.
- ຂ້າພະເຈົ້າໄດ້ຮັບການກະຕຸ້ນໃຫ້ເວົ້າ ຫລື ເຮັດບາງຢ່າງ, ແຕ່ຂ້າພະເຈົ້າບໍ່ເອົາໃຈໃສ່ມັນ.

ໃຫ້ຄິດຫາວິທີທີ່ທ່ານຈະສາມາດພັດທະນາຄວາມສາມາດທີ່ຈະຟັງໃຫ້ດີຂຶ້ນກວ່າເກົ່າ.

### ໃຫ້ພັດທະນາຄວາມສຳພັນທີ່ດີກັບຜູ້ສົນໃຈ

ເພື່ອຈະຫລີກເວັ້ນຈາກຄວາມອັບອາຍ, ບາງຄົນຈະຕອບຄຳຖາມໃນທາງທີ່ເຂົາຄິດວ່າ ທ່ານຢາກໃຫ້ເຂົາຕອບແທນທີ່ຈະແບ່ງປັນຄວາມຮູ້ສຶກທີ່ແທ້ຈິງ. ໃຫ້ສະແຫວງຫາເພື່ອພັດທະນາຄວາມສຳພັນທີ່ຈະອະນຸຍາດໃຫ້ເຂົາສະບາຍໃຈໃນການແບ່ງປັນຄວາມຮູ້ສຶກທີ່ແທ້ຈິງກັບທ່ານ.

## ຊ່ອຍຄົນແກ້ໄຂບັນຫາຂອງເຂົາ

ບາງຄົນທີ່ທ່ານສອນຈະຂາດສັດທາເພື່ອຈະຮັກສາຄຳໝັ້ນສັນຍາ, ບາງຄົນຈະພົບການຕໍ່ຕ້ານ, ແລະ ບາງຄົນຈະບໍ່ຍອມຮັບທຸກສິ່ງທີ່ທ່ານແບ່ງປັນກັບເຂົາ. ເຂົາຕ້ອງເຮັດຕາມການເລືອກຂອງເຂົາເອງ, ແຕ່ທ່ານຕ້ອງເຮັດຈົນສຸດຄວາມສາມາດທີ່ຈະຕອບຄຳຖາມຂອງເຂົາ, ຊ່ອຍເຂົາແກ້ໄຂບັນຫາ, ແລະ ເອົາຊະນະການຕໍ່ຕ້ານ.


ຫ້າມລອກແບບ.

ບາງເທື່ອບັນຫາຂອງຄົນກໍຄືກັນກັບກ້ອນນ້ຳແຂງກ້ອນໃຫຍ່ທີ່ລອຍຢູ່ໃນທະເລ. ມີແຕ່ສ່ວນນ້ອຍທີ່ເຫັນໄດ້ຢູ່ເທິງໜ້ານ້ຳ. ບັນຫາເຫລົ່ານີ້ອາດຈະສັບສົນ ແລະ ແກ້ໄຂຍາກ. ຍ້ອນເຫດຜົນນີ້ ທ່ານຕ້ອງເຮັດຕາມພະວິນຍານ ແລະ ແກ້ໄຂໃນທາງທີ່ເໝາະສົມກັບສະພາບການ. ໃຫ້ອະທິຖານຂໍພອນທາງການຕັດສິນໃຈ ແລະ ໃຫ້ເຮັດຕາມຄວາມປະທັບໃຈຂອງທ່ານ. ພະບິດາເທິງສະຫວັນຮູ້ຈິດໃຈ ແລະ ປະສົບການຂອງທຸກຄົນ (ກ້ອນນ້ຳແຂງທັງກ້ອນ) ແລະ ຈະຊ່ອຍທ່ານໃຫ້ຮັບຮູ້ສິ່ງທີ່ເໝາະສົມສຳລັບແຕ່ລະຄົນ.

ເມື່ອທ່ານຊ່ອຍຄົນແກ້ໄຂບັນຫາຂອງເຂົາ, ທຳອິດໃຫ້ສະແຫວງຫາເພື່ອຈະເຂົ້າໃຈບັນຫາຂອງເຂົາ ໂດຍການຖາມຄຳຖາມ ແລະ ການຟັງ. ໃຫ້ເພິ່ງພາພະວິນຍານເພື່ອຊ່ອຍທ່ານໃຫ້ຮູ້ວິທີທີ່ຈະຊ່ອຍເຂົາແກ້ໄຂບັນຫາຂອງເຂົາ. ຕົວຢ່າງເຊັ່ນ, ທ່ານອາດຈະໃຊ້ພະຄຳພີເພື່ອແກ້ໄຂບັນຫາທີ່ກ່ຽວກັບບັບຕິດສະມາ, ຫລື ທ່ານອາດຈະແບ່ງປັນປະຈັກພະຍານຂອງທ່ານກ່ຽວກັບສາດສະດາ ໂຈເຊັບ ສະມິດ.

ສ່ວນຫລາຍບັນຫາຈະກ່ຽວກັບທາງສັງຄົມແທນທາງຄຳສອນ. ຕົວຢ່າງເຊັ່ນ, ຜູ້ສົນໃຈອາດຈະຢ້ານການຕໍ່ຕ້ານຈາກສະມາຊິກໃນຄອບຄົວ ຖ້າຫາກເຂົາເຂົ້າຮ່ວມສາດສະໜາຈັກ. ຫລື ເຂົາອາດຈະຢ້ານການປະຕິເສດຈາກໝູ່ເພື່ອນຢູ່ບ່ອນ

ໝາຍເຫດ

ທຳງານຂອງເຂົາ. ບັນຫາຈະເປັນອັນໃດກໍຕາມ, ຜູ້ສົນໃຈຂອງທ່ານອາດຈະມີປະສົບການໃນອາດີດ ຫລື ບັນຫາອື່ນທີ່ທ່ານບໍ່ເຂົ້າໃຈ. ໃນຫລາຍໆກໍລະນີ, ສະມາຊິກອາດຈະສາມາດຊ່ອຍທ່ານໃຫ້ເຂົ້າໃຈ ແລະ ຊ່ອຍເຂົາກັບບັນຫາຂອງເຂົາ.

ວິທີທີ່ທ່ານຈະເຂົ້າຫຍຸ້ງກ່ຽວບັນຫາຂອງຜູ້ສົນໃຈຈະຂຶ້ນຢູ່ກັບສະພາບຂອງບັນຫານັ້ນ. ໃຫ້ຕັດສິນໃຈຖ້າຫາກວ່າບັນຫານັ້ນເກີດຂຶ້ນຍ້ອນຄົນຜູ້ນັ້ນບໍ່ໄດ້ຮັບການຢືນຢັນທາງວິນຍານຕໍ່ຄວາມຈິງຂອງການຟື້ນຟູ ຫລືວ່າຍ້ອນຄົນຜູ້ນັ້ນບໍ່ຢາກດຳລົງຊີວິດຕາມຫລັກທຳທີ່ແທ້ຈິງ. ການເຂົ້າໃຈຕົ້ນຕໍຂອງບັນຫາໃນທາງນີ້ ຈະຊ່ອຍທ່ານໃຫ້ຮູ້ວ່າ ຈະເຈາະຈົງຢູ່ທີ່ປະຈັກພະຍານ ຫລື ຄຳໝັ້ນສັນຍາ.

### ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ

ໃຫ້ເລືອກເອົາຄຳໝັ້ນສັນຍາຂໍ້ໜຶ່ງມາສະເໜີເມື່ອທ່ານສອນບົດຮຽນ. ແລ້ວໃຫ້ຈຳແນກບັນຫາຕ່າງໆທີ່ອາດຈະເຮັດໃຫ້ບາງຄົນບໍ່ຍອມຮັບ ຫລື ຮັກສາຄຳໝັ້ນສັນຍາ. ໃຫ້ສົນທະນາກັນ ແລະ ຝຶກວິທີທີ່ທ່ານຈະສາມາດຊ່ອຍຄົນໄດ້ດີທີ່ສຸດ ເມື່ອເຂົາພະຍາຍາມແກ້ໄຂບັນຫາຂອງເຂົາ.

## ການກັບໃຈ ແລະ ການເຊົາຈາກການຕິດແສດ

ການກັບໃຈເປັນວິທີທາງຝ່າຍວິນຍານທີ່ກ່ຽວຂ້ອງກັບຄວາມຖ່ອມຕົນ, ການສາລະພາບ, ການໃຊ້ແທນ, ແລະ ການຫັນໜ້າໜີຈາກບາບ. ມັນເປັນການປ່ຽນແປງທີ່ຖາວອນຂອງຄວາມຄິດ ແລະ ການກະທຳ. ດີແທ້ແລ້ວ, ການກັບໃຈຈາກບາບ ຄວນຈຳເປັນແຕ່ເທື່ອດຽວ. ເຖິງຢ່າງໃດກໍຕາມ, ຖ້າຫາກບາບນັ້ນຖືກເຮັດຊ້ຳອີກ, ການກັບໃຈກໍມີໃຫ້ຕາມທີ່ເປັນການປິ່ນປົວ (ເບິ່ງ Mosiah 26:30; ໂມໂລໄນ 6:8; D&C 1:31–32).

ການກັບໃຈອາດຈະກ່ຽວກັບທາງຄວາມຮູ້ສຶກ ແລະ ທາງຮ່າງກາຍ. ເຂົາຕ້ອງເຊົາປະພຶດຕົນໃນທາງທີ່ເຄີຍຊິນທີ່ບໍ່ສົມຄວນ. ການກະທຳທີ່ບໍ່ໜ້າປາດຖະໜາຕ້ອງຖືກແທນດ້ວຍການປະພຶດທີ່ດີ ແລະ ຖືກຕ້ອງ.

ສະນັ້ນ, ທັງການກັບໃຈ ແລະ ການເຊົາເຮັດອາດຈະໃຊ້ເວລາ. ບາງເທື່ອສະມາຊິກໃໝ່, ເຖິງແມ່ນວ່າມີຄວາມເຈດຕະນາທີ່ດີທີ່ສຸດ, ຈະຍອມແພ້ການຫລອກລວງ ຂະນະທີ່ເຂົາກ້າວໜ້າໄປສູ່ການຄວບຄຸມຕົນເອງ. ໃນກໍລະນີແບບນີ້ ສະມາຊິກໃໝ່ຈະໃຫ້ຜູ້ນຳຖານະປະໂລຫິດຂອງເຂົາຊ່ອຍເຫລືອ, ບໍ່ແມ່ນຜູ້ສອນສາດສະໜາ, ເມື່ອເຂົາພະຍາຍາມເອົາຊະນະການຫລອກລວງ ແລະ ກັບໃຈໃຫ້ເຕັມສ່ວນ.

ຜ່ານທາງບັບຕິດສະມາ ແລະ ການຢືນຢັນ ຄົນຈະໄດ້ຮັບຂອງປະທານແຫ່ງພະວິນຍານບໍລິສຸດ, ທີ່ຈະເຮັດໃຫ້ເຂົາມີຄວາມສາມາດຫລາຍຂຶ້ນ ທີ່ຈະເອົາຊະນະບັນຫາເຫລົ່ານີ້. ແຕ່ການຮັບບັບຕິດສະມາ ແລະ ການຢືນຢັນອາດຈະບໍ່ສາມາດກຳຈັດການກະຕຸ້ນທາງຄວາມຮູ້ສຶກ ແລະ ທາງຮ່າງກາຍທີ່ໄປກັບການປະພຶດເຫລົ່ານີ້ໃຫ້ຫາຍໄປ. ເຖິງແມ່ນວ່າຄົນອາດຈະມີຄວາມສຳເລັດໃນຕອນຕົ້ນ, ແຕ່ຕ້ອງໄດ້ຮັບການປິ່ນປົວທາງຄວາມຮູ້ສຶກຕໍ່ໄປອີກ ຈົນເຖິງຂັ້ນກັບໃຈຢ່າງແທ້ຈິງ ແລະ ໄດ້ຮັບການປິ່ນປົວທີ່ສຳເລັດ.

### ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ

- ໃຫ້ຄິດເຖິງຜູ້ສົນໃຈ, ສະມາຊິກໃໝ່, ຫລື ສະມາຊິກທີ່ບໍ່ເຂັ້ມແຂງທີ່ພະຍາຍາມເອົາຊະນະການຕິດແສດ.
- ໃຫ້ທົບທວນ "ສັດທາໃນພະເຢຊູຄຣິດ" ແລະ "ການກັບໃຈ" ຈາກບົດຮຽນ "ພະກິດຕິຄຸນຂອງພະເຢຊູຄຣິດ" ໃນບົດທີ 3.
- ທ່ານຈະສາມາດສອນຫຍັງໃຫ້ຜູ້ນີ້ຈາກບົດຮຽນນີ້ ແລະ ຈາກບົດນີ້ ເພື່ອຊ່ອຍເຂົາໃຫ້ເອົາຊະນະການຕິດແສດໄດ້?
- ຈັດບົດຮຽນເພື່ອຊ່ອຍຄົນຜູ້ນີ້.

## ການຊ່ອຍຜູ້ສົນໃຈ ແລະ ສະມາຊິກໃໝ່ໃຫ້ເຂົ້າໃຈການກັບໃຈ ແລະ ການເຊົາຈາກການຕິດແສດ.

ທ່ານອາດຖືກຂໍໃຫ້ຕອບຄຳຖາມ ແລະ ຄວາມຫ່ວງໄຍກ່ຽວກັບການຕິດແສດ. ທ່ານອາດຈະຕ້ອງໄດ້ຊ່ອຍຄົນໃຫ້ພົບເຫັນຄຳຕອບຕໍ່ຄຳຖາມທີ່ຫຍຸ້ງຍາກ ທີ່ກ່ຽວກັບບັນຫາເຫລົ່ານີ້. ແນວຄິດດັ່ງຕໍ່ໄປນີ້ອາດຈະຊ່ອຍໄດ້:

ໝາຍເຫດ

- ສະແດງປະຈັກພະຍານຂອງທ່ານເຖິງການປິ່ນປົວແບບທຳມະຊາດຂອງພະກິດຕິຄຸນ, ໂດຍສະເພາະການຊົດໃຊ້ (see Alma 7:11–13).
- ໃຫ້ສະແດງປະຈັກພະຍານວ່າ ມີແຕ່ພະເຈົ້າເທົ່ານັ້ນ ທີ່ຈະສາມາດເຮັດການອັດສະຈັນຂອງການປິ່ນປົວທາງວິນຍານໄດ້ (ເບິ່ງ ເພງສັນລະເສີນ 147:3).
- ໃຫ້ອະທິບາຍວ່າ ຂອງປະທານແຫ່ງການປິ່ນປົວມີໃຫ້ທັງຮ່າງກາຍ ແລະ ວິນຍານ.



© 2000 Simon Dewey. ຫ້າມລອກແບບ.

ຂັ້ນຕອນເບື້ອງຕົ້ນທີ່ຈະຊ່ອຍຄົນໃຫ້ໄດ້ຮັບການປິ່ນປົວທາງຄວາມຮູ້ສຶກແມ່ນຮ່ວມດ້ວຍ:

- ຈຳແນກ ແລະ ການຮັບຮູ້ບັນຫາ. ການເຮັດສິ່ງນີ້ ຈະຕ້ອງໄດ້ກວດກາຕົວເອງຢ່າງລະອຽດ ແລະ ສັດຊື່.
- ຮັບຮູ້ວ່າການປະພຶດນັ້ນອັນຕະລາຍ. ມັນກະທົບກະເທືອນຄົນອື່ນ ແລະ ຕ້ອງໄດ້ປ່ຽນ.
- ຖ່ອມຕົວ ແລະ ຮູ້ສຶກເສຍໃຈ.
- ສະແຫວງຫາການໃຫ້ອະໄພຈາກຜູ້ອື່ນທີ່ໄດ້ຖືກເຮັດໃຫ້ເສຍຫາຍ, ແລະ ຮຽນທີ່ຈະໃຫ້ອະໄພຕົນເອງ.
- ເຊົາເຮັດສິ່ງທີ່ຕິດແສດ ແລະ ເລີ່ມເຮັດສິ່ງທີ່ດີຕໍ່ສຸກຂະພາບ.
- ເປັນຢູ່ຢ່າງສັດຊື່—ຮັກສາພັນທະສັນຍາແຫ່ງການຮັບບັບຕິສະມາ, ໃຫ້ການຮັບໃຊ້, ອະທິຖານຂໍຄວາມຊ່ອຍເຫລືອຈາກພະວິນຍານບໍລິສຸດ, ແລະ ສະແດງຄວາມປາດຖະໜາທີ່ຈະຮັກສາພະບັນຍັດຂອງພະເຈົ້າ.
- ເຂົ້າໃຈວ່າພະຜູ້ເປັນເຈົ້າຈະຮັກລູກໆຂອງພະອົງຢູ່ຕະຫລອດ—ເຖິງແມ່ນຕອນເຂົາເຮັດຜິດ ແລະ ຍອມແພ້ຕໍ່ຄວາມປາດຖະໜາເກົ່າກໍຕາມ. ການກັບໃຈ ແລະ ຫົນທາງຂອງການກັບຄືນມາຈະມີໄວ້ສຳລັບເຂົາສະເໝີ.

## ແຜນສຳລັບການເອົາຊະນະການປະພຶດຂອງການຕິດແສດ

ຜູ້ສົນໃຈ ແລະ ສະມາຊິກໃໝ່ ແລະ ສະມາຊິກທີ່ບໍ່ເຂັ້ມແຂງ ອາດຈະຖາມເຖິງສິ່ງທີ່ເຂົາສາມາດເຮັດໄດ້ ເພື່ອຈະໄດ້ເຊົາຈາກການຕິດແສດ. ເຂົາໄວ້ວາງໃຈໃນຄວາມສາມາດຂອງທ່ານທີ່ຈະໃຫ້ຄຳແນະນຳ ແລະ ການສະໜັບສະໜູນ. ຄຳແນະນຳດັ່ງຕໍ່ໄປນີ້ອາດຈະຊ່ອຍໄດ້:

- ໃຫ້ເຂົາຂຽນເວລາ, ສະຖານທີ່, ແລະ ຊື່ຄົນລົງ ທີ່ຊຸກຍູ້ເຂົາໃນການປະພຶດ. ແລ້ວໃຫ້ສົນທະນາໃບລາຍການນີ້ກັບພັນລະຍາ ຫລື ສາມີ, ອະທິການ, ຜູ້ສອນສາດສະໜາປະຈຳຫວອດ, ຫລື ໝູ່ເພື່ອນທີ່ໄວ້ໃຈໄດ້ ຄົນໃດຄົນໜຶ່ງຂອງເຂົາ. ໃຫ້ປຶກສາກັນເຖິງສິ່ງທີ່ເຂົາຈະຕ້ອງເຮັດເພື່ອປ່ຽນແປງ ຫລື ຫລີກເວັ້ນຈາກສິ່ງທີ່ຢູ່ໃນໃບລາຍການນັ້ນ.
- ໃຫ້ເຂົາຂຽນສິ່ງທີ່ການປະພຶດນັ້ນເຮັດໃຫ້ເຂົາຂາດຫຍັງໃນປະຈຸບັນນີ້ ແລະ, ຖ້າຫາກບໍ່ແກ້ໄຂ, ມັນຈະເຮັດໃຫ້ເຂົາຂາດຫຍັງໃນອະນາຄົດ.
- ໃຫ້ເຂົາຂຽນສິ່ງຕ່າງໆທີ່ເຂົາສາມາດເຮັດໄດ້ ເພື່ອຈະຫລີກເວັ້ນ ຫລື ຈະຫ້າມປາມການປະພຶດທີ່ບໍ່ສົມຄວນນັ້ນ. ນີ້ອາດຈະຮ່ວມທັງການເວົ້າລົມກັບພັນລະຍາ ຫລື ສາມີຂອງຕົນ, ການໂທຫາອະທິການ ຫລື ໝູ່ເພື່ອການສະໜັບສະໜູນ, ການອອກກຳລັງກາຍ, ແລະ ການເຮັດກິດຈະກຳອື່ນໆ ທີ່ຈະຊ່ອຍເຂົາໃຫ້ຫລີກເວັ້ນຈາກການລໍ້ລວງນັ້ນ.
- ຊຸກຍູ້ເຂົາໃຫ້ອະທິຖານເປັນປະຈຳ, ໃຫ້ສຶກສາພະຄຳພີ, ໃຫ້ຟັງເພງທີ່ເຮັດໃຫ້ເບີກບານ, ແລະ ໃຫ້ອ່ານປຶ້ມທີ່ເປັນປະໂຫຍດ.

ໝາຍເຫດ



- ຊຸກຍູ້ເຂົາໃຫ້ສະແຫວງຫາພອນຂອງຖານະປະໂລຫິດ.
- ຊຸກຍູ້ເຂົາໃຫ້ເຂັ້ມແຂງໃນສາດສະໜາຈັກຕໍ່ໄປ, ເຊິ່ງເປັນບ່ອນທີ່ຈະຊ່ອຍເຂົາໃຫ້ເອົາຊະນະບັນຫາຂອງເຂົາໄດ້ ແລະ ເຂົ້າໃກ້ພະຜູ້ເປັນເຈົ້າຫລາຍຂຶ້ນ.
- ຊຸກຍູ້ເຂົາໃຫ້ໄປຮ່ວມກຸ່ມຊ່ອຍເຫລືອທີ່ເໝາະສົມ ຫລື ຂໍຄວາມຊ່ອຍເຫລືອຈາກຜູ້ຊ່ຽວຊານ. ຢູ່ໃນບາງບ່ອນກໍມີ LDS Family Services (ອົງການຊ່ອຍເຫລືອສະມາຊິກຂອງສາດສະໜາຈັກ) ບໍລິການນຳອີກ.
- ຊຸກຍູ້ເຂົາບໍ່ໃຫ້ຍອມແພ້! ພະຜູ້ເປັນເຈົ້າຈະຊ່ອຍເຂົາ, ເຖິງແມ່ນວ່າມັນຈະໃຊ້ເວລາກໍຕາມ.

ສະມາຊິກທີ່ເຂັ້ມແຂງສາມາດຊ່ອຍສະມາຊິກໃໝ່ໃຫ້ເຂັ້ມແຂງຢູ່ໄດ້ໂດຍການເປັນໝູ່ເພື່ອນເຂົາ. ສະມາຊິກຄວນປະຕິບັດກັບຜູ້ສົນໃຈ ແລະ ສະມາຊິກໃໝ່ດ້ວຍທ່າທາງທີ່ອົບອຸ່ນ ແລະ ດີ. ຜູ້ສົນໃຈ ແລະ ສະມາຊິກໃໝ່ຈະຕອບດ້ວຍຄວາມຊື່ນຊົມເມື່ອຖືກຕ້ອນຮັບດ້ວຍຄວາມຍິ້ມແຍ້ມ, ເມື່ອຖືກຖາມວ່າເຂົາເປັນຈັ່ງໃດ, ເມື່ອຜູ້ອື່ນນັ່ງກັບເຂົາໃນການປະຊຸມ, ແລະ ເມື່ອເຂົາຖືກເຊີນໄປກິນເຂົ້າ ຫລື ໄປຮ່ວມການສັງສັນໃນຄອບຄົວກັບຜູ້ອື່ນ.

ມັນກໍເປັນຄວາມຈິງທີ່ບາງຄົນຈະກັບຄືນໄປຫາການຕິດແສດອີກ, ຜູ້ນຳຖານະປະໂລຫິດ ແລະ ສະມາຊິກບໍ່ຄວນຕົກໃຈ ຫລື ທໍ້ຖອຍໃຈ ຖ້າຫາກເຂົາຮຽນຮູ້ວ່າຜູ້ສົນໃຈ ຫລື ສະມາຊິກໃໝ່ກຳລັງມີບັນຫາແບບນັ້ນ. ເຂົາຄວນສະແດງຄວາມໝັ້ນໃຈນຳຄົນນັ້ນ ແລະ ບໍ່ໃຫ້ຕັດສິນ ຖ້າຫາກຄົນນັ້ນຍອມແພ້ຕໍ່ຄວາມປາດຖະໜາເກົ່າ. ເຂົາຄວນຖືວ່າ ເປັນການໝຸນກັບທີ່ອະທິບາຍໄດ້ ແລະ ຊົ່ວຄາວ. ການຕຳໜິຜູ້ສົນໃຈ ຫລື ສະມາຊິກໃໝ່ທີ່ຕິດແສດ ຈະບໍ່ມີປະໂຫຍດ ແລະ ມັນຈະນຳໄປສູ່ການທໍ້ຖອຍໃຈ, ການບໍ່ສຳເລັດ, ແລະ ການເຊົາມາໂບດ. ສະມາຊິກໃໝ່ທີ່ຢຸດມາໂບດໃນທັນທີທັນໃດ ອາດຍອມແພ້ຕໍ່ການຕິດແສດເກົ່າ ແລະ ຮູ້ສຶກວ່າບໍ່ມີຄ່າຄວນ ແລະ ທໍ້ຖອຍໃຈ. ການຢ້ຽມຢາມໃນທັນທີເພື່ອໃຫ້ກຳລັງໃຈ ແລະ ການສະໜັບສະໜູນ ຈະຊ່ອຍຄົນນັ້ນໃຫ້ເອົາຊະນະໄດ້. ສະມາຊິກຄວນສະແດງອອກວ່າ ເຂົາຕ້ອນຮັບສະມາຊິກໃໝ່ທັງດ້ວຍຄຳເວົ້າ ແລະ ການກະທຳ (ເບິ່ງ 3 ນີໄຟ 18:32).

ການເຂັ້ມແຂງໃນສາດສະໜາຈັກ ແລະ ການພາກພຽນທີ່ຈະດຳລົງຊີວິດຢ່າງສັດຊື່ ເປັນສິ່ງສຳຄັນທີ່ສຸດ ທີ່ຄົນເຮົາສາມາດເຮັດໄດ້ໃນການເອົາຊະນະບັນຫາທາງການຕິດແສດ.

**ກິດຈະກຳ: ການສຶກສາສ່ວນຕົວ**

ໃຫ້ນຶກເຖິງນິໄສບາງຢ່າງທີ່ທ່ານມີ—ສິ່ງທ່ານເຮັດເລື້ອຍໆ ໂດຍບໍ່ໄດ້ຄິດ, ດັ່ງເຊັ່ນ ບີບຂໍ້ມື, ແປງແວ່ນຕາ, ກິນຫລາຍເກີນໄປ, ຫລື ນອນຕື່ນສວຍ. ບັດນີ້ໃຫ້ທ່ານລອງບໍ່ເຮັດສິ່ງນີ້ມື້ໜຶ່ງ. ເມື່ອທ່ານເຮັດສຳເລັດ, ໃຫ້ພະຍາຍາມບໍ່ເຮັດໝົດອາທິດ. ໃຫ້ສົນທະນາປະສົບການຂອງທ່ານກັບຄູ່ສອນສາດສະໜາຂອງທ່ານ. ແລ້ວໃຫ້ພະຍາຍາມຄິດເບິ່ງວ່າມັນຈະຍາກຫລາຍປານໃດສຳລັບຜູ້ສົນໃຈທີ່ຈະເອົາຊະນະການຕິດແສດ ດັ່ງການສູບຢາ ຫລື ການກິນເຫລົ້າ.

## ໃຫ້ປະສິ່ງໃດສິ່ງໜຶ່ງໄວ້

ໃນຕອນທ້າຍການສອນແຕ່ລະຄັ້ງ, ໃຫ້ຈັດບາງສິ່ງໄວ້ໃຫ້ຜູ້ສົນໃຈທີ່ຈະອ່ານ ແລະ ໄຕ່ຕອງເພື່ອຕຽມສຳລັບການນັດພົບເທື່ອໜ້າ. ທ່ານອາດຈະໃຫ້ເຂົາເຈົ້າອ່ານບົດໜຶ່ງຈາກພະຄຳພີມໍມອນ. ທ່ານອາດຈະເອົາໃບໂຄສະນາທີ່ກ່າວເຖິງສິ່ງທີ່ທ່ານໄດ້ສອນ ຫລື ສິ່ງທີ່ທ່ານຈະສອນໃນການຢ້ຽມຢາມເທື່ອໜ້າ, ຫລື ອາດຈະເປັນໜັງສື ຫລື ກະແຊັດໜັງໃຫ້ເຂົາເຈົ້າ. ຖ້າຫາກເຂົາເຈົ້າມີຄອມພິວເຕີ, ໃຫ້ຊຸກຍູ້ເຂົາເຈົ້າໃຫ້ເປີດເບິ່ງ www.mormon.org. ເຂົາເຈົ້າຈະໄດ້ມີສິ່ງໃດສິ່ງໜຶ່ງເພື່ອເອົາໄປຄິດ, ໄຕ່ຕອງ, ແລະ ອະທິຖານເຖິງສະເໝີ. ສິ່ງນີ້ຈະກາຍເປັນຫົວເລື່ອງຂອງບົດຮຽນທ່ານ ເມື່ອທ່ານພົບກັນເທື່ອໜ້າ.

ໝາຍເຫດ

### ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ

ໃຫ້ທົບທວນສິ່ງທີ່ທ່ານມີ ທີ່ຈະປະໄວ້ນຳຜູ້ສົນໃຈ ຮ່ວມທັງໃບໂຄສະນາ ແລະ ກະແຊັດໜັງ. ມີສິ່ງໃດອີກບໍທີ່ທ່ານຕ້ອງໄດ້ຈັດຫາ ເພື່ອທ່ານຈະສາມາດແບ່ງປັນມັນກັບຜູ້ສົນໃຈຂອງທ່ານ? ໃຫ້ຂຽນສິ່ງຂອງທີ່ທ່ານຕ້ອງໄດ້ສັ່ງຈອງໄວ້ໃນປະຕິທິນຂອງທ່ານ.

ໃຫ້ພິຈາລະນາເຖິງຜູ້ສົນໃຈແຕ່ລະຄົນທີ່ທ່ານມີນັດເພື່ອສອນອາທິດນີ້. ມີບົດໃດໃນພະຄຳພີມໍມອນທີ່ຈະເປັນຜົນປະໂຫຍດແກ່ເຂົາຫລາຍ? ມີສິ່ງໃດອີກບໍທີ່ເປັນຜົນປະໂຫຍດແກ່ເຂົາ? ໃຫ້ຂຽນໄວ້ໃນ ໝາຍເຫດ/ສິ່ງທີ່ຕ້ອງເຮັດໃນປະຕິທິນຂອງທ່ານ ສິ່ງທີ່ທ່ານມີເຈດຕະນາຈະເອົາໃຫ້ຜູ້ສົນໃຈແຕ່ລະຄົນ ແລະ ສິ່ງທີ່ທ່ານຈະເຮັດເພື່ອຕິດຕາມຜົນໃນການຢ້ຽມຢາມເທື່ອໜ້າ.

## ສອນພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ໃຫ້ແກ່ຜູ້ທີ່ຂາດພື້ນຖານຊາວຄິດສະຕຽນ

ບາງຄົນທີ່ທ່ານຈະສອນ ອາດຈະບໍ່ເຊື່ອໃນພະບິດາເທິງສະຫວັນ ແລະ ພະເຢຊູຄິດ ຫລື ນັບຖືປະເພນີຂອງຊາວຄິດສະຕຽນ. ເຖິງຢ່າງໃດກໍຕາມ ຫລາຍຄົນເຫລົ່ານີ້ ຈະມີຄວາມເຊື່ອ, ການປະຕິບັດ, ແລະ ມີບ່ອນໃດບ່ອນໜຶ່ງທີ່ເຂົານັບຖືວ່າສັກສິດ. ໃນຖານະທີ່ເປັນຜູ້ຮັບໃຊ້ຂອງພະເຈົ້າ, ມັນສຳຄັນທີ່ທ່ານຈະສະແດງຄວາມເຄົາລົບນັບຖື ຕໍ່ຄວາມເຊື່ອຖືແລະ ປະເພນີຂອງເຂົາ. ຢ່າເຮັດສິ່ງໃດທີ່ຈະສະແດງຄວາມບໍ່ເຄົາລົບຕໍ່ສິ່ງທີ່ສຳຄັນສຳລັບເຂົາ.

ທ່ານອາດຢາກຮູ້ວ່າ ທ່ານຈະປັບວິທີສອນຂອງທ່ານ ເມື່ອທ່ານເຂົ້າຫາຄົນເຫລົ່ານີ້ໃນວິທີໃດ. ມັນຈະເປັນປະໂຫຍດທີ່ຈະຈື່ຈຳວ່າ ກ່ອນຈະປ່ຽນໃຈເຫລື້ອມໃສໄດ້ນັ້ນ, ລູກໆຂອງພະອົງທຸກຄົນ, ບໍ່ວ່າຈະມີເບື້ອງຫລັງເປັນມາແນວໃດກໍຕາມ, ເຂົາຕ້ອງພັດທະນາສັດທາໃນພະເຢຊູຄິດ, ກັບໃຈ, ຮັບພິທີການບັບຕິສະມາ ແລະ ການຢືນຢັນ, ແລະ ອົດທົນຈົນເຖິງທີ່ສຸດໂດຍການຮັກສາພະບັນຍັດ ແລະ ຮັບໃຊ້. ຫລັກທຳທີ່ຈະຊ່ອຍຜູ້ອື່ນໃຫ້ສ້າງສັດທາໃນພະເຢຊູຄິດແມ່ນຄືກັນໃນທຸກໆວັດທະນະທຳ.

ທ່ານສາມາດຊ່ອຍຄົນໃຫ້ມີຄວາມເຂົ້າໃຈທີ່ຖືກຕ້ອງເຖິງພະເຈົ້າທີ່ເປັນພະບິດາເທິງສະຫວັນຂອງເຮົາ ແລະ ພັດທະນາສັດທາໃນພະເຢຊູຄິດ ໂດຍການຊ່ອຍເຂົາໃຫ້ມີປະສົບການສ່ວນຕົວທາງວິນຍານ ແທນທີ່ຈະບອກເຂົາແບບງ່າຍໆກ່ຽວກັບລັກສະນະຂອງພະເຈົ້າ. ຕົວຢ່າງເຊັ່ນ, ທ່ານຈະຊ່ອຍຄົນໃຫ້ມີຄວາມເຂົ້າໃຈເມື່ອເຂົາ:

- ມີຄວາມເຊື່ອໝັ້ນວ່າພະເຈົ້າຜູ້ເປັນພະບິດາ ແລະ ພະບຸດ, ພະເຢຊູຄິດ, ໄດ້ມາປາກົດຕໍ່ສາດສະດາ ໂຈເຊັບ ສະມິດ.
- ໄດ້ຟັງການສອນ ແລະ ປະຈັກພະຍານທີ່ຈິງໃຈເຖິງພະກິດຕິຄຸນ, ຮ່ວມທັງວ່າເປັນຫຍັງທ່ານໄດ້ເລືອກຕິດຕາມພະເຢຊູຄິດ.
- ໄດ້ຟັງທ່ານ ແລະ ສະມາຊິກຄົນອື່ນ ເວົ້າລົມກັບພະບິດາເທິງສະຫວັນໃນການອະທິຖານທີ່ງ່າຍໆ ແລະ ຈິງໃຈ.
- ໄດ້ຍິນທ່ານກ່າວປະຈັກພະຍານທີ່ມີພະລັງ.
- ອະທິຖານກັບທ່ານ ແລະ ເປັນສ່ວນຕົວ.
- ຮຽນຮູ້ວ່າທ່ານຮູ້ສຶກແນວໃດກ່ຽວກັບຂໍ້ພະຄຳພີ ເມື່ອທ່ານອ່ານ ແລະ ສົນທະນາກ່ຽວກັບມັນ.
- ອ່ານພະຄຳຂອງພະເຈົ້າຈາກພະຄຳພີທຸກວັນ (ໂດຍສະເພາະ ຈາກພະຄຳພີມໍມອນ).
- ໄປໂບດເພື່ອເຂົາຈະສາມາດເຫັນວິທີທີ່ເຮົານະມັດສະການພະຜູ້ເປັນເຈົ້າ.
- ພົບສະມາຊິກຂອງສາດສະໜາຈັກຜູ້ທີ່ສາມາດອະທິບາຍວິທີທີ່ເຂົາໄດ້ມາເຊື່ອໃນພະບິດາເທິງສະຫວັນ ແລະ ພະເຢຊູຄິດ.
- ຮັກສາພະບັນຍັດ.

ກິດຈະກຳເຫລົ່ານີ້ກໍມີຜົນປະໂຫຍດສຳລັບທຸກໆຄົນທີ່ທ່ານສອນ, ແຕ່ມັນສຳຄັນໃນເວລາທີ່ທ່ານສອນ ຜູ້ທີ່ຂາດພື້ນຖານຊາວຄິດສະຕຽນ ເພາະວ່າຄົນເຫລົ່ານີ້ຄົງບໍ່ເຄີຍມີປະສົບການເຊັ່ນນີ້ມາກ່ອນ.

ສະມາຊິກໃໝ່ສ່ວນຫລາຍຜູ້ມາຈາກພື້ນຖານທີ່ບໍ່ແມ່ນຊາວຄິດສະຕຽນ ໄດ້ລາຍງານວ່າ ເຂົາບໍ່ເຂົ້າໃຈສິ່ງທີ່ຜູ້ສອນສາດສະໜາເວົ້າ ແຕ່ເຂົາຮູ້ສຶກເຖິງພະວິນຍານ ແລະ ຢາກເຮັດຕາມທີ່ຜູ້ສອນສາດສະໜາໄດ້ຂໍຮ້ອງ. ທ່ານຕ້ອງເຮັດຈົນສຸດຄວາມສາມາດ ເພື່ອຊ່ອຍຜູ້ສົນໃຈໃຫ້ເຂົ້າໃຈຄຳສອນຂອງພະກິດຕິຄຸນ. ໃຫ້ອົດທົນ ແລະ ສະໜັບສະໜູນ, ມັນອາດຈະໃຊ້

ໝາຍເຫດ

ເວລາ ເພື່ອຄົນຈະຮູ້ຈັກຈຳແນກ ແລະ ສະແດງຄວາມຮູ້ສຶກທີ່ເຂົາມີຢູ່. ທ່ານອາດຈຳເປັນຕ້ອງປ່ຽນແປງຄວາມໄວ ແລະ ຄວາມເລິກຂອງການສອນຂອງທ່ານ ເພື່ອຊ່ອຍເຂົາໃຫ້ເຂົ້າໃຈ. ເມື່ອທ່ານຕຽມສອນຜູ້ຄົນທີ່ຂາດພື້ນຖານຊາວຄຶດສະຕຽນ, ຂໍ້ແນະນຳດັ່ງຕໍ່ໄປນີ້ອາດຈະຊ່ອຍໄດ້:

- ໃຫ້ສະຫລຸບ ແລະ ທົບທວນແຕ່ລະບົດຮຽນແບບງ່າຍໆ.
- ຂໍໃຫ້ເຂົາບອກທ່ານເຖິງສິ່ງທີ່ເຂົາເຂົ້າໃຈ ແລະ ສິ່ງທີ່ເຂົາໄດ້ປະສົບ.
- ໃຊ້ເວລາແປຄຳສັບ ແລະ ຫລັກທຳທີ່ສຳຄັນ. ຄົນທີ່ທ່ານສອນອາດຈະບໍ່ຮູ້ຄຳສັບສ່ວນຫລາຍ ທີ່ທ່ານຈະໃຊ້ເມື່ອທ່ານສອນ.
- ໃຫ້ກັບຄືນໄປຫາບົດຮຽນທີ່ໄດ້ສອນມາແລ້ວ ເພື່ອສອນຄຳສອນໃຫ້ຊັດເຈນກວ່າເກົ່າ. ນີ້ອາດຈະຈຳເປັນໃນເວລາໃດກໍໄດ້ ໃນຂັ້ນຕອນການສອນ.

## ຕົວຢ່າງໃນພະຄຳພີ

ພະຄຳພີບັນຈຸຕົວຢ່າງຂອງຜູ້ສອນສາດສະໜາທີ່ໄດ້ສອນຜູ້ທີ່ບໍ່ເຊື່ອໃນພະເຈົ້າ ຫລື ຜູ້ທີ່ເຂົ້າໃຈຜິດເຖິງຫລັກສະນະທີ່ແທ້ຈິງຂອງພະອົງ. ໃຫ້ສຶກສາພະຄຳພີຂ້າງລຸ່ມ, ແລະ ແລ້ວອະທິບາຍໃຫ້ຄູ່ສອນສາດສະໜາຂອງທ່ານຟັງ ຫລື ຂຽນມັນໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ ເຖິງວິທີທີ່ຜູ້ສອນສາດສະໜາເຫລົ່ານີ້ໄດ້ຊ່ອຍຄົນໃຫ້ມີປະຈັກພະຍານວ່າ ພະເຈົ້າມີຈິງ.

- ແອລະມາ ແລະ ອະມິວເລັກ (Alma 9–11; ແອລະມາ 12; Alma 15)
- ແອມັນ ແລະ ລາໂມນ (Alma 17–22)
- ແອລະມາ (Alma 30)
- ແອລະມາ ແລະ ຜູ້ອື່ນໆ (Alma 31; ແອລະມາ 32; Alma 33–35)
- ໂປໂລ (ກິດຈະການ 17:16–34)

## ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ

ເມື່ອເປັນໄປໄດ້, ໃຫ້ຊອກຫາຜູ້ປ່ຽນໃຈເຫລື້ອມໃສ ເຊິ່ງບໍ່ເຄີຍໄດ້ມີສ່ວນກັບປະເພນີ ຊາວຄຶດສະຕຽນ ກ່ອນພົບກັບຜູ້ສອນສາດສະໜາ. ຫາເວລາໄປພົບເຂົາ, ແລະ ຖາມເຖິງປະສົບການທາງການປ່ຽນໃຈຂອງເຂົາ. ຕົວຢ່າງເຊັ່ນ, ທ່ານອາດຈະຖາມສິ່ງທີ່ໄດ້ນຳພາຄົນຜູ້ນັ້ນໃຫ້ມາເຊື່ອໃນພະເຈົ້າ, ຄັ້ງທຳອິດທີ່ເຂົາໄດ້ອະທິຖານ, ຄັ້ງທຳອິດທີ່ເຂົາໄດ້ຮູ້ສຶກຄຳຕອບຕໍ່ການອະທິຖານ, ບົດບາດຂອງພະຄຳພີໃນການປ່ຽນໃຈຂອງເຂົາ, ແລະ ວ່າການໄປໂບດໃນວັນອາທິດເປັນຈັ່ງໃດ. ໃຫ້ຂຽນສິ່ງທີ່ທ່ານຮຽນຮູ້ໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

## ໃຫ້ຈື່ຈຳສິ່ງນີ້

- ເມື່ອຄົນໄດ້ຮຽນຮູ້ພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ ແລະ ດຳລົງຊີວິດຕາມນັ້ນ, ຄວາມຕ້ອງການຂອງເຂົາຈະຖືກຕອບສະໜອງ.
- ໃຫ້ວາງແຜນ ແລະ ສຶກສາແຕ່ລະມື້ກັບຄູ່ສອນສາດສະໜາຂອງທ່ານ ເພື່ອຈະໄດ້ເປັນໜຶ່ງ ແລະ ສອນດ້ວຍສຽງດຽວ.
- ແບ່ງປັນປະຈັກພະຍານເລື້ອຍໆ.
- ພະຄຳພີ, ໂດຍສະເພາະ ພະຄຳພີມໍມອນ, ເປັນແຫລ່ງພື້ນຖານສຳລັບການສອນ.
- ອະທິຖານເພື່ອທູນຂໍຂອງປະທານແຫ່ງການຕັດສິນໃຈ ເພື່ອຈະໄດ້ຮູ້ເວລາທີ່ຈະໃຊ້ຄວາມຊຳນານທີ່ໄດ້ບັນຍາຍໄວ້ໃນບົດນີ້.

## ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

ໝາຍເຫດ

### ການສຶກສາສ່ວນຕົວ

- ໃຫ້ລືມມຸດວ່າທ່ານໄດ້ຢູ່ໃນສະພາບການດັ່ງຕໍ່ໄປນີ້. ທ່ານຈະໃຊ້ຫລັກທຳ ແລະ ຄວາມຊຳນານຢູ່ໃນບົດນີ້ ເພື່ອຊ່ອຍຄົນໃຫ້ກ້າວໜ້າໄດ້ວິທີໃດ? ໃຫ້ວາງແຜນວິທີທີ່ທ່ານຈະນຳໃຊ້ມັນໃນແຕ່ລະສະພາບການ.
  - ໃນຂະນະທີ່ທ່ານກຳລັງຍ່າງໄປຕາມສວນສາທາລະນະ, ທ່ານໄດ້ເຫັນຜູ້ຍິງຄົນໜຶ່ງ ແລະ ເດັກນ້ອຍຜູ້ຊາຍຄົນໜຶ່ງ ນັ່ງຢູ່ໃນມ້ານັ່ງຍາວ. ຍິງຄົນນັ້ນກຳລັງຮ້ອງໄຫ້.
  - ທ່ານໄດ້ໄປເຖິງບ້ານຂອງຜູ້ສົນໃຈທີ່ໄດ້ຕຽມຮັບບັບຕິສະມາ, ແລະ ເຂົາບອກທ່ານວ່າເຂົາບໍ່ຢາກພົບກັບທ່ານອີກຕໍ່ໄປ.
  - ທ່ານກຳລັງພົບຄັ້ງທີເຈັດກັບຜູ້ສົນໃຈທີ່ຖືກສອນໂດຍຜູ້ສອນສາດສະໜາຫລາຍຄູ່ແລ້ວໃນລະຍະສອງປີ. ຖ້າຫາກມີຄວາມກ້າວໜ້າກໍມີໜ້ອຍດຽວ.
  - ທ່ານກຳລັງເລີ່ມສອນຂ່າວສານພະກິດຕິຄຸນໃຫ້ແກ່ຄອບຄົວທີ່ເປັນສະມາຊິກ, ແລະ ເຂົາເຈົ້າເວົ້າວ່າ, "ພວກເຮົາໄດ້ຖາມທຸກຄົນທີ່ພວກເຮົາຮູ້ແລ້ວວ່າ ຢາກພົບກັບຜູ້ສອນສາດສະໜາບໍ, ແລະ ທຸກຄົນເວົ້າວ່າ ເຂົາບໍ່ສົນໃຈ."
- ໃຫ້ເລືອກເອົາບົດຮຽນຂອງຜູ້ສອນສາດສະໜາບົດໜຶ່ງ. ໃຫ້ຊອກຫາຂໍ້ພະຄຳພີຂໍ້ໜຶ່ງ ຫລື ສອງຂໍ້ ຈາກແຕ່ລະຫລັກທຳທີ່ສຳຄັນ. ໃຫ້ຝຶກສອນຈາກຂໍ້ພະຄຳພີເຫລົ່ານີ້ ຕາມທີ່ໄດ້ເຮັດເປັນໂຄງຮ່າງໄວ້ໃນພາກ "ໃຫ້ໃຊ້ພະຄຳພີ" ໃນບົດນີ້.
- ໃນລະຍະເວລາສາມສີ່ອາທິດ, ໃຫ້ທົບທວນການສອນຂອງພະຜູ້ຊ່ອຍໃຫ້ລອດໃນພະທຳ (ມັດທາຍ, ມາລະໂກ, ລູກາ, ໂຢຮັນ) ແລະ 3 ນີໄຟ. ໃນປຶ້ມບັນທຶກການສຶກສາຂອງທ່ານ, ໃຫ້ຂຽນຄຳຖາມທີ່ພະອົງໄດ້ຖາມ. ໃຫ້ປຽບທຽບມັນໃສ່ກັບຄຳຖາມທີ່ທ່ານຖາມເລື້ອຍໆ.
- ໃຫ້ອ່ານເລື່ອງຂອງ ແອມັນ ແລະ ກະສັດລາໂມໄນ ໃນ Alma 18 ແລະ ເລື່ອງຂອງອາໂລນ ໃນ Alma 22:4–18. ໃນເວລາທ່ານອ່ານ, ໃຫ້ຊອກຫາ ແລະ ບັນຍາຍວິທີທີ່ ແອມັນ ແລະ ອາໂລນ:
  - ໄດ້ຕິດຕາມພະວິນຍານ ແລະ ໄດ້ສອນດ້ວຍຄວາມຮັກ.
  - ໄດ້ເລີ່ມສອນ.
  - ໄດ້ປ່ຽນວິທີສອນຂອງເຂົາເພື່ອໃຫ້ເຂົ້າກັບຄວາມຕ້ອງການ.
  - ໄດ້ກ່າວປະຈັກພະຍານ.
  - ໄດ້ໃຊ້ພະຄຳພີ.
  - ໄດ້ຖາມຄຳຖາມ, ໄດ້ຟັງ, ແລະ ໄດ້ແກ້ໄຂບັນຫາ.
  - ໄດ້ສະໜັບສະໜູນຄົນທີ່ເຂົາສອນໃຫ້ເຮັດຄຳໝັ້ນສັນຍາ.
- ໃຫ້ໄຕ່ຕອງຂໍ້ຄວາມຂອງປະທານ ແຮໂລນ ບີ ລີ ທີ່ກ່ຽວກັບການສອນເພື່ອຄວາມເຂົ້າໃຈ. ໃຫ້ຊັ່ງຊາເບິ່ງວ່າ ທ່ານສອນຄຳສອນຂອງພະກິດຕິຄຸນຊັດເຈນປານໃດ. ໃຫ້ບັນທຶກສິ່ງທີ່ທ່ານຮຽນຮູ້ໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

  "ໃຫ້ທ່ານສອນຢູ່ພາຍໃຕ້ຂໍ້ຄວາມຂອງພະຄຳພີ ແລະ ເຮັດໃຫ້ຂໍ້ຄວາມນີ້ເຂົ້າໃຈໄດ້ງ່າຍ" (*The Teachings of Harold B. Lee*, sel. Clyde J. Williams [1996], 444).

ໝາຍເຫດ

"ພວກທ່ານ ໃນຖານະທີ່ເປັນຄູສອນ ບໍ່ໄດ້ຖືກສົ່ງອອກໄປເພື່ອສອນຄຳສອນໃໝ່. ທ່ານຕ້ອງສອນຄຳສອນເກົ່າ, ບໍ່ແມ່ນໃນຄຳທີ່ງ່າຍເກີນໄປ ຈົນເຂົາພຽງແຕ່ເຂົ້າໃຈເທົ່ານັ້ນ, ແຕ່ທ່ານຕ້ອງສອນຄຳສອນຂອງສາດສະໜາຈັກໃຫ້ຊັດເຈນ ຈົນວ່າບໍ່ມີໃຜຈະເຂົ້າໃຈຜິດໄດ້" (*The Teachings of Harold B. Lee*, 458).

## ການສຶກສາກັບຄູ່ສອນສາດສະໜາ

- ໃຫ້ທົບທວນບົດຮຽນຂອງທ່ານຈາກບົດທີ່ທ່ານຫາກໍໄດ້ສອນມາ. ໃຫ້ຂຽນຄຳຖາມຄຳໜຶ່ງສຳລັບຫລັກທຳທີ່ສຳຄັນ ທີ່ໄດ້ເຮັດເປັນໂຄງຮ່າງໄວ້ແລ້ວນັ້ນ ໄວ້ໃນແຜນຂອງທ່ານ. ແລ້ວໃຫ້ທົບທວນຄຳຖາມຂອງທ່ານ ເພື່ອຈະໄດ້ເຫັນ ຖ້າຫາກວ່າມັນສອດຄ່ອງກັບສິ່ງທີ່ທ່ານໄດ້ສອນມາແລ້ວໃນບົດນີ້ຫລືບໍ່. ຕໍ່ໄປ, ໃຫ້ຕອບຄຳຖາມແຕ່ລະຄຳ ຄືກັບວ່າທ່ານເປັນຜູ້ສົນໃຈ. ໃຫ້ປ່ຽນຄຳຖາມຂອງທ່ານຕາມທີ່ຈຳເປັນ. ໃຫ້ແບ່ງປັນຄຳຖາມນີ້ກັບຄູ່ສອນສາດສະໜາຂອງທ່ານ. ໃຫ້ຊັ່ງຊາຄຳຖາມຂອງທ່ານພ້ອມກັນ.

  ໃຫ້ພິຈາລະນາເຖິງຄວາມຕ້ອງການຂອງຜູ້ສົນໃຈທີ່ທ່ານກຳລັງສອນ. ໃຫ້ສົນທະນາກັນເຖິງວິທີທີ່ເຂົາຈະຕອບຄຳຖາມຂອງທ່ານແນວໃດ. ພ້ອມນີ້ ໃຫ້ສົນທະນາກັນເຖິງວິທີທີ່ຄຳຖາມເຫລົ່ານີ້ອາດຈະເຊື້ອເຊີນພະວິນຍານໃຫ້ມາສະຖິດຢູ່ນຳ ແລະ ຊ່ອຍຜູ້ສົນໃຈໃຫ້ຮຽນຮູ້ພະກິດຕິຄຸນແນວໃດ.

- ໃຫ້ຄິດກ່ຽວກັບຜູ້ສົນໃຈໃໝ່ຂອງທ່ານແຕ່ລະຄົນ. ໃຫ້ສົນທະນາກັນເຖິງສິ່ງທີ່ທ່ານຈະສາມາດເຮັດໄດ້ ເພື່ອຊ່ອຍເຂົາໃຫ້ກາຍເປັນຜູ້ສົນໃຈ ທີ່ກຳລັງກ້າວໜ້າ. ໃຫ້ຂຽນແນວຄິດຂອງທ່ານໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ ແລະ ວາງແຜນໄວ້ໃນປະຕິທິນປະຈຳວັນຂອງທ່ານ.

## ການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດ

- ເຊື້ອເຊີນໃຫ້ສະມາຊິກ ຫລື ຜູ້ສົນໃຈໃນປະຈຸບັນມາຮ່ວມການປະຊຸມຂອງທ່ານ. ອະທິບາຍໃຫ້ກຸ່ມຮູ້ວ່າ ທ່ານຢາກໃຫ້ຜູ້ສອນສາດສະໜາພັດທະນາຄວາມສາມາດຂອງເຂົາເຈົ້າໃນການແບ່ງປັນຂ່າວສານທີ່ສຳຄັນຂອງເຂົາ. ໃຫ້ເລືອກເອົາບົດຮຽນ ແລະ ຄວາມຊຳນານໜຶ່ງ. ໃຫ້ຜູ້ສອນສາດສະໜາສອນບົດຮຽນທີ່ທ່ານໄດ້ເລືອກໄວ້ແກ່ສະມາຊິກ ຫລື ຜູ້ສົນໃຈ ປະມານ 20 ນາທີ, ເຈາະຈົງຢູ່ທີ່ຄວາມຊຳນານທີ່ທ່ານໄດ້ຈຳແນກແລ້ວ. ໃຫ້ເຂົາປ່ຽນບົດບາດ ຫລັງຈາກ 20 ນາທີ. ຫລັງຈາກຜູ້ສອນສາດສະໜາໄດ້ມີໂອກາດສອນແລ້ວ, ໃຫ້ກຸ່ມກັບຄືນມາຫາກັນ ແລະ ໃຫ້ສະມາຊິກ ແລະ ຜູ້ສົນໃຈບອກຜູ້ສອນສາດສະໜາເຖິງສິ່ງທີ່ໄດ້ຜົນດີ ແລະ ສິ່ງທີ່ເຂົາສາມາດປັບປຸງ.

- ສາຍໜັງໃຫ້ເຂົາເບິ່ງຕົວຢ່າງທີ່ຜູ້ສອນສາດສະໜາສອນ ຫລື ຕິດຕໍ່ຄົນ. ໃຫ້ເລືອກຄວາມຊຳນານໃດໜຶ່ງ ແລະ ໃຫ້ສົນທະນາເປັນກຸ່ມ ເຖິງວິທີທີ່ຜູ້ສອນສາດສະໜາໃນໜັງໄດ້ນຳໃຊ້ຫລັກທຳສຳລັບຄວາມຊຳນານນັ້ນໄດ້ດີປານໃດ.

- ໃຫ້ເລືອກຄວາມຊຳນານໃດໜຶ່ງ ຫລື ສ່ວນທີ່ສຳຄັນຂອງຄວາມຊຳນານ, ແລະ ໃຫ້ຊອກຫາຄຳສອນ ຫລື ຂໍ້ຄວາມໃນພະຄຳພີທີ່ສົ່ງເສີມຄວາມຊຳນານນັ້ນ. ໃຫ້ສອນພື້ນຖານຄຳສອນຂອງຄວາມຊຳນານໃຫ້ແກ່ຜູ້ສອນສາດສະໜາ.

ໝາຍເຫດ

## ປະກາດເຜີຍແຜ່

- ບາງຄັ້ງບາງຄາວ ໃຫ້ໄປນຳຜູ້ສອນສາດສະໜາເວລາເຂົາສອນ. ໃຫ້ວາງແຜນກັບເຂົາເຖິງວິທີທີ່ທ່ານຈະສາມາດມີສ່ວນຮ່ວມໃນການສອນນັ້ນ.
- ຊຸກຍູ້ຜູ້ນຳຖານະປະໂລຫິດໃຫ້ໄປນຳຜູ້ສອນສາດສະໜາໃນການຢ້ຽມສອນຂອງເຂົາ ແລະ ໃຫ້ຄວາມຄິດເຫັນ.
- ສະແດງວິທີໃຊ້ພະຄຳພີ, ຄຳຖາມ, ແລະ ການຟັງທີ່ໄດ້ຜົນ ເມື່ອທ່ານສອນຜູ້ສອນສາດສະໜາໃນກອງປະຊຸມເຂດ ແລະ ໃນການສຳພາດ.

ໝາຍເຫດ



# ເຮົາຈະຊ່ອຍເຫລືອຜູ້ຄົນໃຫ້ເຮັດ ແລະ ຮັກສາຄຳໝັ້ນສັນຍາໄດ້ແນວໃດ?

ໝາຍເຫດ

### ໃຫ້ພິຈາລະນາເລື່ອງນີ້

- ເປັນຫຍັງເຮົາຈຶ່ງຄວນຕັ້ງໃຈຕໍ່ການເຊື້ອເຊີນຄົນໃຫ້ເຮັດຄຳໝັ້ນສັນຍາ?
- ຄຳໝັ້ນສັນຍາກ່ຽວພັນກັບການປ່ຽນແປງແນວໃດ?
- ເຮົາຈະສະແດງປະຈັກພະຍານແບບຖ່ອມຕົວໄດ້ແນວໃດ?
- ເຮົາສາມາດສັນຍາພອນອັນໃດແດ່?
- ເປັນຫຍັງມັນຈຶ່ງສຳຄັນສຳລັບເຮົາທີ່ຈະຕິດຕາມຜົນຕໍ່ໄປເມື່ອຄົນເຮັດຄຳໝັ້ນສັນຍາແລ້ວ?

## ເຊື້ອເຊີນໃຫ້ເຮັດຄຳໝັ້ນສັນຍາ

ໃນຖານະເປັນຜູ້ສອນສາດສະໜາ ທ່ານປາດຖະໜາໃຫ້ຈິດວິນຍານຂອງມະນຸດໄດ້ຮັບຄວາມລອດ (see Mosiah 28:3). ທ່ານຮູ້ວ່າຄົນສາມາດມາສູ່ພະຄິດ ແລະ ຈະໄດ້ຮັບຄວາມລອດຕາມເງື່ອນໄຂຂອງການກັບໃຈເທົ່ານັ້ນ (see D&C 18:10–16). ວິທີໜຶ່ງເພື່ອຈະເຮັດໃຫ້ຄວາມປາດຖະໜາຂອງທ່ານໄດ້ຮັບຜົນສຳເລັດຄືການເອີ້ນໃຫ້ຄົນກັບໃຈ (ເບິ່ງ ແອລະມາ 5:49; D&C 15:6; 16:6) ແລະ ເຊື້ອເຊີນຄົນຢ່າງກ້າຫານເພື່ອໃຫ້ໃຊ້ສັດທາຈົນເຖິງການກັບໃຈ, ເພື່ອຮັບບັບຕິດສະມາໂດຍນ້ຳ ແລະ ພະວິນຍານ, ແລະ ເພື່ອອົດທົນຈົນເຖິງທີ່ສຸດ ຢ່າງສັດຊື່ (ເບິ່ງ 3 ນີໄຟ 27:16–20; ມໍມອນ 7:10).

ຄຳໝັ້ນສັນຍາຄືສ່ວນໜຶ່ງທີ່ສຳຄັນຂອງການກັບໃຈ. ມັນຄືຂໍ້ຜູກມັດສຳລັບຕົວເອງທີ່ຈະເຮັດຕາມ ແລະ ຫລັງຈາກນັ້ນ ພະຍາຍາມເຮັດໃຫ້ການຕັດສິນໃຈນັ້ນໄດ້ຮັບຜົນສຳເລັດ. ເມື່ອຄົນເອົາໃຈໃສ່ດ້ວຍຄວາມຈິງໃຈ, ເຂົາເຈົ້າມີເຈດຕະນາທີ່ແທ້ຈິງ, ໝາຍຄວາມວ່າເຂົາເຈົ້າມີເຈດຕະນາແທ້ໆທີ່ຈະເຮັດຕາມຄຳໝັ້ນສັນຍາທີ່ໃຫ້ໄວ້. ເຂົາເຈົ້າເຮັດການຕັດສິນໃຈທີ່ແນ່ວແນ່ ແລະ ຈິງໃຈເພື່ອຈະປ່ຽນແປງ. ເຂົາເຈົ້າມອບຕົວຕໍ່ພະຄິດ ແລະ ອຸທິດຕົນຕໍ່ພະກິດຕິຄຸນຂອງພະອົງ. ການຮັກສາຄຳໝັ້ນສັນຍາເປັນວິທີທີ່ເຂົາເຈົ້າສະແດງຢ່າງຈິງໃຈໂດຍການກະທຳວ່າ ເຂົາເຈົ້າໄດ້ຮັບພະວິນຍານຂອງພະຄິດຈົນເຖິງຮັບການປົດຈາກບາບຂອງເຂົາເຈົ້າ (see D&C 20:37). ເມື່ອທ່ານຂໍໃຫ້ຜູ້ສົນໃຈເຮັດຄຳໝັ້ນສັນຍາຕາມການສອນຂອງທ່ານ, ທ່ານໄດ້ເຊື້ອເຊີນໃຫ້ເຂົາເຈົ້າກັບໃຈ.

© 2002 Del Parson. ຫ້າມລອກແບບ.

ໝາຍເຫດ

ວິທີໜຶ່ງທີ່ດີທີ່ສຸດເພື່ອຊ່ອຍເຫລືອຄົນໃຫ້ເຮັດ ແລະ ຮັກສາຄຳໝັ້ນສັນຍາແມ່ນການເຊື້ອເຊີນໃຫ້ເຮັດຄຳໝັ້ນສັນຍາ. ການເຊື້ອເຊີນ ແລະ ການຕິດຕາມຜົນຂອງການເຊື້ອເຊີນໃຫ້ເຮັດຄຳໝັ້ນສັນຍາແມ່ນສິ່ງສຳຄັນ ເພາະວ່າ:

- ຜູ້ຄົນປ່ຽນໃຈເຫລື້ອມໃສເມື່ອເຂົາເຈົ້າດຳລົງຊີວິດຕາມຫລັກທຳທີ່ເຂົາເຈົ້າໄດ້ຮຽນມາ (ເບິ່ງ ໂຢຮັນ 7:17) ແລະ ຮູ້ສຶກເຖິງການຢືນຢັນຂອງພະວິນຍານວ່າ ສິ່ງທີ່ເຂົາເຈົ້າກຳລັງເຮັດຢູ່ ເຮັດໃຫ້ພະບິດາເທິງສະຫວັນພໍພະໄທ.


© 2001 Simon Dewey. ຫ້າມລອກແບບ.

- ການກັບໃຈ ແລະ ການປ່ຽນແປງຈະຊ່ອຍໃຫ້ຄົນເອົາຊະນະຕໍ່ການທ້າທາຍ, ປະຖິ້ມຄວາມລະອາຍໃຈ ແລະ ຄວາມຮູ້ສຶກຜິດ, ແລ້ວມາປະສົບການກັບຄວາມສະຫງົບ ແລະ ຄວາມປິຕິຍິນດີຂອງການໃຫ້ອະໄພຂອງພະເຈົ້າ.
- ການຮັກສາຄຳໝັ້ນສັນຍາຕຽມຄົນໃຫ້ເຮັດ ແລະ ຮັກສາພັນທະສັນຍາອັນສັກສິດຕ່າງໆ.

ທ່ານສາມາດສະແດງຄວາມຮັກຕໍ່ຜູ້ຄົນ ແລະ ສັດທາຂອງທ່ານໃນຄຳສັນຍາຂອງພະເຈົ້າໂດຍຕິດຕາມຕໍ່ໄປເພື່ອຊ່ອຍເຂົາເຈົ້າກັບໃຈ ແລະ ຮັກສາຄຳໝັ້ນສັນຍາຂອງເຂົາເຈົ້າ.

ຄຳໝັ້ນສັນຍາທີ່ຈຳເປັນເພື່ອການຮັບບັບຕິດສະມາມີຢູ່ໃນສີ່ບົດຮຽນທຳອິດ. ຄຳໝັ້ນສັນຍາທີ່ພົວພັນກັບຄວາມເຕີບໂຕທາງວິນຍານຫລັງຈາກຮັບບັບຕິດສະມາ ແລະ ຮັບການຢືນຢັນມີຢູ່ໃນບົດຮຽນທີ 5. ໃຫ້ຮູ້ຕະຫລອດເວລາ ກ່ຽວກັບຄວາມຕ້ອງການທີ່ຈະເຊື້ອເຊີນຄົນໃຫ້ເຮັດສິ່ງທີ່ຈະເຮັດໃຫ້ສັດທາຂອງເຂົາເຈົ້າເຂັ້ມແຂງຂຶ້ນໃນພະຄິດ. ໃຫ້ຈື່ຈຳຫລັກທຳດັ່ງຕໍ່ໄປນີ້:

- ທຸກໆໂອກາດທີ່ຈະຊອກຫາ—ນຳສະມາຊິກ, ຜູ້ແນະນຳ, ຫລື ການຕິດຕໍ່ດ້ວຍຕົວເອງ—ຄວນນຳໄປສູ່ການເຊື້ອເຊີນທີ່ຈະເຮັດ, ສ່ວນຫລາຍແມ່ນເພື່ອຈະໃຫ້ຮຽນຮູ້ກ່ຽວກັບຂ່າວສານຂອງການຟື້ນຟູຫລາຍຂຶ້ນ.
- ໜ້ອຍຄັ້ງ, ຖ້າເປັນໄປໄດ້, ທ່ານບໍ່ຄວນຈະເວົ້າລົມນຳຄົນ ຫລື ສອນເຂົາເຈົ້າປາດສະຈາກການເຊື້ອເຊີນໃຫ້ເຮັດສິ່ງໃດສິ່ງໜຶ່ງທີ່ຈະເຮັດໃຫ້ສັດທາຂອງເຂົາເຈົ້າເຂັ້ມແຂງຂຶ້ນໃນພະຄິດ.
- ຕັ້ງໃຈໃສ່ຕໍ່ຄຳໝັ້ນສັນຍາຂໍ້ໜຶ່ງ ຫລື ຫລາຍກວ່ານັ້ນເມື່ອທ່ານສອນ. ຖ້າທ່ານບໍ່ເຊື້ອເຊີນຄົນໃຫ້ເຮັດຄຳໝັ້ນສັນຍາເຫລົ່ານີ້, ກໍໝາຍຄວາມວ່າ ທ່ານບໍ່ໄດ້ຂໍໃຫ້ເຂົາເຈົ້າກັບໃຈ ແລະ ມາສູ່ພະຄິດ.
- ເມື່ອທ່ານຕຽມພ້ອມໃນການສຶກສາກັບຄູ່ສອນສາດສະໜາເພື່ອຈະສອນບົດຮຽນ, ໃຫ້ພິຈາລະນາຄວາມຕ້ອງການ ແລະ ສະພາບຂອງຜູ້ສົນໃຈແຕ່ລະຄົນ ແລະ ຮ່ວມຄຳໝັ້ນສັນຍາຂໍ້ໜຶ່ງ ຫລື ຫລາຍກວ່ານັ້ນ ໃນແຜນບົດຮຽນຂອງທ່ານ.
- ລະຫວ່າງສອນບົດຮຽນ ທ່ານອາດຈະຖືກດົນໃຈໃຫ້ເຊື້ອເຊີນຜູ້ສົນໃຈໃຫ້ເຮັດຄຳໝັ້ນສັນຍາທີ່ຕ່າງຈາກແຜນທີ່ທ່ານໄດ້ວາງໄວ້. ໃຫ້ເຊື້ອເຊີນຄົນໃຫ້ກັບໃຈສະເໝີ.
- ໃຫ້ມີຄວາມກ້າຫານ ແລະ ໝັ້ນໃຈເມື່ອທ່ານຈະໄດ້ເຊື້ອເຊີນຄົນໃຫ້ເຮັດຄຳໝັ້ນສັນຍາ (see Alma 38:12). ຄວາມກ້າຫານສະແດງອອກເຖິງສັດທາຂອງທ່ານ ວ່າການເຊື່ອຟັງຕໍ່ພະບັນຍັດຂອງພະຜູ້ເປັນເຈົ້ານຳພອນມາໃຫ້.
- ຜູ້ຄົນຈະບໍ່ປ່ຽນແປງນອກຈາກວ່າເຂົາເຈົ້າໄດ້ຖືກເຊື້ອເຊີນໃຫ້ປ່ຽນແປງ.

## ການສຶກສາພະຄຳພີ

### ເປັນຫຍັງມັນຈຶ່ງເປັນສິ່ງສຳຄັນທີ່ຈະສະເໜີການເຊື້ອເຊີນ?

| | |
|---|---|
| ແອລະມາ 5:62 | ໂມໂລໄນ 7:13 |

### ເປັນຫຍັງຄຳໝັ້ນສັນຍາຈຶ່ງສຳຄັນຫລາຍ?

| | | |
|---|---|---|
| 2 ນີໄຟ 31 | ແອລະມາ 32:27 | D&C 20:37 |
| ໂມໄຊຍາ 2:41 | D&C 14:7 | ໂຢຮັນ 7:17 |
| Alma 7:14–16 | | |

ໝາຍເຫດ

## ຖາມຄຳຖາມໂດຍກົງ

ສ່ວນຫລາຍ ການເຊື້ອເຊີນໃຫ້ເຮັດຄຳໝັ້ນສັນຍາຮ່ວມດ້ວຍຄຳຖາມທີ່ວ່າ "ທ່ານຈະ" ເຊິ່ງຕ້ອງຕອບວ່າ *ເອີ້* ຫລື ບໍ່. ການເຊື້ອເຊີນຄວນເຈາະຈົງ, ໂດຍກົງ, ແລະ ແຈ່ມແຈ້ງ. ຄຳຖາມເຫລົ່ານີ້ເຊື້ອເຊີນ ຫລື ນຳພາຄົນໃຫ້ຕັດສິນໃຈທີ່ຈະເຮັດ. ຜູ້ສົນໃຈຄວນເຮັດຄຳໝັ້ນສັນຍາ ແລະ ໃຊ້ສັດທາໃນຫລັກທຳ ທີ່ທ່ານໄດ້ສອນໃຫ້ເຂົາເຈົ້າ.

ຕໍ່ໄປນີ້ແມ່ນຕົວຢ່າງຕ່າງໆຂອງການເຊື້ອເຊີນທີ່ດີ, ຕິດຕາມດ້ວຍຄຳເວົ້າຕອບຕົ້ນຂອງຄຳສັນຍາ ແລະ ປະຈັກພະຍານ:

- ທ່ານຈະອ່ານ [3 ນີໄຟ 11, ໂມໂລໄນ 10:3–5, ປຶ້ມນ້ອຍຫົວນີ້] ກ່ອນພວກເຮົາຈະມາຢ້ຽມຢາມມື້ອື່ນ ຕອນ 7:00 ໂມງແລງບໍ? ເຮົາຮູ້ວ່າຖ້າທ່ານເຮັດແບບນີ້ ທ່ານຈະ . . . ເຮົາຂໍເປັນພະຍານວ່າ ພະຄຳພີມໍມອນແມ່ນ . . .
- ທ່ານຈະອະທິຖານ ແລະ ຖາມພະເຈົ້າວ່າ ໂຢເຊັບ ສະມິດ ເປັນສາດສະດາຫລືບໍ່? ເຮົາຮູ້ວ່າ ເມື່ອທ່ານອະທິຖານ ພະເຈົ້າຈະ . . . ເຮົາຮູ້ວ່າ ໂຢເຊັບ ສະມິດ ເປັນສາດສະດາ . . .
- ທ່ານຈະໄປໂປດນຳພວກເຮົາບໍວັນອາທິດນີ້ເວລາ 9:00 ໂມງເຊົ້າ? ຖ້າທ່ານໄປ, ທ່ານຈະ . . . ເຮົາຮູ້ວ່າສາດສະໜາຈັກຂອງພະຄຣິດໄດ້ຖືກຟື້ນຟູຄືນມາໃໝ່ແລ້ວ . . .
- ທ່ານຈະເລີ່ມຕົ້ນຮັກສາກົດພົມມະຈັນຕາມທີ່ພວກເຮົາໄດ້ອະທິບາຍບໍ? ການດຳລົງຊີວິດຕາມກົດນີ້ຈະ . . . ໃນຖານະເປັນຜູ້ຮັບໃຊ້ຂອງພະຜູ້ເປັນເຈົ້າ ເຮົາຂໍເປັນພະຍານວ່າ ການດຳລົງຊີວິດຕາມກົດພົມມະຈັນຈະ . . .
- ທ່ານຈະເຊື້ອເຊີນ [ຊື່ຄົນ] ກ່ອນວັນສຸກເພື່ອໃຫ້ມາພົບກັບພວກເຮົາ ແລະ ເລີ່ມຕົ້ນຮຽນກ່ຽວກັບພະກິດຕິຄຸນບໍ? ພະວິນຍານຈະຊ່ອຍທ່ານ . . . ການແບ່ງປັນພະກິດຕິຄຸນຈະໃຫ້ພອນແກ່ຊີວິດຂອງທ່ານ . . .
- ພວກເຮົາຂໍມາບ້ານຂອງທ່ານ ແລະ ບອກເລື່ອງທີ່ພະເຈົ້າໄດ້ເອີ້ນສາດສະດາຄົນໜຶ່ງໃນສະໄໝຂອງເຮົາຄືກັນກັບທີ່ພະອົງໄດ້ເຮັດໃນສະໄໝໂບຮານໃຫ້ທ່ານຟັງຕື່ມອີກໄດ້ບໍ? ເປົ້າໝາຍ, ການຊີ້ນຳ, ແລະ ຄວາມສະຫງົບຈະເຂົ້າມາໃນຊີວິດທ່ານຫລາຍຂຶ້ນ ເມື່ອທ່ານເຂົ້າໃຈວ່າ . . . ເຮົາຂໍເປັນພະຍານວ່າ ພະເຈົ້າໄດ້ເອີ້ນອີກ . . .

### ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ

ໃນປຶ້ມບັນທຶກການສຶກສາຂອງທ່ານ, ໃຫ້ຂຽນການເຊື້ອເຊີນທີ່ງ່າຍ, ໂດຍກົງ, ແລະ ແຈ່ມແຈ້ງ ສຳລັບຄຳໝັ້ນສັນຍາແຕ່ລະຂໍ້ໃນບົດຮຽນ. ຖ້າທ່ານໄດ້ເຮັດກິດຈະກຳນີ້ມາກ່ອນ, ໃຫ້ເຮັດອີກ ແລະ ປຽບທຽບການເຊື້ອເຊີນໃໝ່ຂອງທ່ານກັບອັນເກົ່າ. ຖາມຕົວເອງວ່າ ຄວາມສາມາດຂອງທ່ານທີ່ຈະສະເໜີການເຊື້ອເຊີນໄດ້ເພີ່ມຂຶ້ນຫລືບໍ່.

ທົບທວນການເຊື້ອເຊີນທີ່ທ່ານໄດ້ຂຽນໄວ້ນຳຄູ່ສອນສາດສະໜາຂອງທ່ານ. ສຳລັບການເຊື້ອເຊີນແຕ່ລະຂໍ້, ໃຫ້ສົນທະນາຄຳຖາມດັ່ງຕໍ່ໄປນີ້:

- ເຮົາໄດ້ອະທິບາຍພອນທີ່ພະຜູ້ເປັນເຈົ້າສັນຍາໄວ້ເມື່ອເຮົາສະເໜີການເຊື້ອເຊີນບໍ? ຖ້າວ່າບໍ່, ເປັນຫຍັງ?
- ເຮົາໄດ້ຫລີກລ້ຽງຈາກການສະເໜີການເຊື້ອເຊີນຂໍ້ນີ້ບໍ? ຖ້າຢ່າງນັ້ນ, ເປັນຫຍັງ?
- ເຮົາຮູ້ສຶກອຶດອັດເມື່ອເຮົາສະເໜີການເຊື້ອເຊີນຂໍ້ນີ້ບໍ? ເຮົາຈະເຮັດໃຫ້ດີຂຶ້ນໄດ້ແນວໃດ?
- ການເຊື້ອເຊີນຂໍ້ນີ້ມີຄວາມສຳຄັນສ່ວນຕົວຕໍ່ເຮົາຢ່າງໃດ?
- ເຮົາຈື່ຈຳທີ່ຈະຕິດຕາມຜົນຕໍ່ໄປກ່ຽວກັບການເຊື້ອເຊີນທີ່ເຮົາໄດ້ສະເໜີແລ້ວເລື້ອຍປານໃດ? ເຮົາຈະເຮັດໃຫ້ດີຂຶ້ນໄດ້ແນວໃດ?

ຄິດຫາຜູ້ສົນໃຈ ຫລື ສະມາຊິກທີ່ບໍ່ເຂັ້ມແຂງທີ່ທ່ານຮູ້ຈັກ, ແລະ ຝຶກວິທີສະເໜີການເຊື້ອເຊີນ ຄືກັນກັບວ່າທ່ານກຳລັງເວົ້າຕໍ່ຄົນເຫລົ່ານີ້.

ເມື່ອຈຳເປັນ, ໃຫ້ປັບປຸງການເຊື້ອເຊີນໃນແຜນບົດຮຽນຂອງທ່ານ. ຕັ້ງເປົ້າໝາຍພິເສດທີ່ຈະຊ່ອຍໃຫ້ທ່ານສະເໜີການເຊື້ອເຊີນຕະຫລອດວັນ ແລະ ຕະຫລອດອາທິດ.

ໝາຍເຫດ

## ສັນຍາກັບຄົນວ່າເຂົາເຈົ້າຈະໄດ້ຮັບພອນ

ຜູ້ຄົນຕ້ອງການເຫດຜົນທີ່ຈະປ່ຽນຄວາມຄິດ ແລະ ການກະທຳຂອງເຂົາເຈົ້າ. ພອນທີ່ໄດ້ສັນຍາໄວ້ຈະເປັນການຊຸກຍູ້ໃຫ້ເຊື່ອຟັງພະເຈົ້າສະເໝີ. ເມື່ອພະຜູ້ເປັນເຈົ້າໃຫ້ພະບັນຍັດ, ພະອົງສັນຍາສະເໝີວ່າ ຈະປະທານພອນໃຫ້ ໃນການຮັກສາພະບັນຍັດນັ້ນ (see D&C 130:20–21). ເມື່ອທ່ານຕຽມຜູ້ຄົນເພື່ອໃຫ້ເຊື່ອຟັງພະບັນຍັດຂໍ້ໃດຂໍ້ໜຶ່ງ, ໃຫ້ສອນເຂົາເຈົ້າວ່າ:

- ການດຳລົງຊີວິດຕາມພະບັນຍັດ ເປັນການສະແດງຄວາມຮັກຕໍ່ພະເຈົ້າ ແລະ ພະບຸດຂອງພະອົງ.
- ເຂົາເຈົ້າສະແດງຄວາມໄວ້ວາງໃຈໃນພະເຈົ້າ ເມື່ອເຂົາເຈົ້າເຊື່ອຟັງພະບັນຍັດຂອງພະອົງ.
- ເຂົາເຈົ້າຈະໄດ້ຮັບພອນທັງຫລາຍທີ່ພະອົງໄດ້ສັນຍາໄວ້ເປັນການຕອບແທນ.

ເມື່ອທ່ານເປັນພະຍານຕໍ່ພະບັນຍັດ, ໃຫ້ເວົ້າກ່ຽວກັບພອນຕ່າງໆທີ່ທ່ານໄດ້ຮັບຈາກການດຳລົງຊີວິດຕາມພະບັນຍັດນັ້ນ. ສັນຍາກັບຄົນທີ່ທ່ານສອນວ່າ ເຂົາເຈົ້າສາມາດໄດ້ຮັບພອນຄ້າຍໆກັນ.

ເມື່ອຜູ້ຄົນພະຍາຍາມຮັກສາຄຳໝັ້ນສັນຍາ, ຂໍໃຫ້ເຂົາເຈົ້າເວົ້າກ່ຽວກັບພອນທີ່ພະບິດາເທິງສະຫວັນ ໄດ້ໃຫ້ແກ່ເຂົາເຈົ້າ. ໃຫ້ເຂົາເຈົ້າໝັ້ນໃຈວ່າ ເຖິງແມ່ນຄວາມຫຍຸ້ງຍາກຈະເຂົ້າມາສູ່ຊີວິດຂອງເຂົາເຈົ້າກໍຕາມ, ແຕ່ພອນທັງຫລາຍຂອງພະອົງຈະມີຕໍ່ໄປ ເມື່ອເຂົາເຈົ້າເຮັດຕາມຄວາມປາດຖະໜາຂອງພະອົງ.

### ການສຶກສາພະຄຳພີ

**ພະຜູ້ເປັນເຈົ້າກ່າວຫຍັງແດ່ກ່ຽວກັບຄວາມປາດຖະໜາຂອງພະອົງທີ່ຈະໃຫ້ພອນແກ່ເຮົາ?**

| | | |
|---|---|---|
| Alma 37:17 | D&C 1:37 | D&C 76:5–10 |

### ກິດຈະກຳ: ການສຶກສາສ່ວນຕົວ

ອ່ານ Doctrine and Covenants 82:10 ແລະ 130:20–21. ຫລັງຈາກນັ້ນ ໃຫ້ສຶກສາຂໍ້ພະຄຳພີດັ່ງຕໍ່ໄປນີ້. ເຮັດເປັນສອງແຖວໃນປຶ້ມບັນທຶກການສຶກສາຂອງທ່ານ. ໃນຂ້າງໜຶ່ງ ໃຫ້ຂຽນພະບັນຍັດທີ່ທ່ານເຫັນໃນພະຄຳພີແຕ່ລະຂໍ້. ອີກຂ້າງໜຶ່ງ ໃຫ້ຂຽນຄຳສັນຍາສຳລັບການຮັກສາພະບັນຍັດນັ້ນ.

| | | |
|---|---|---|
| D&C 11:21 | D&C 89:18–21 | D&C 100:5–8 |
| D&C 84:85 | D&C 95:8–9 | ມາລາກີ 3:10–12 |

ທົບທວນຄຳໝັ້ນສັນຍາທີ່ມີຢູ່ໃນບົດຮຽນບົດໜຶ່ງຂອງຜູ້ສອນສາດສະໜາ. ຕອບຄຳຖາມດັ່ງຕໍ່ໄປນີ້ສຳລັບຄຳໝັ້ນສັນຍາແຕ່ລະຂໍ້:

- ພະຜູ້ເປັນເຈົ້າສັນຍາຈະໃຫ້ພອນອັນໃດແດ່ແກ່ຜູ້ທີ່ຮັກສາຄຳໝັ້ນສັນຍານີ້?
- ການເຊື່ອຟັງຫລັກທຳນີ້ຈະຊ່ອຍໃຫ້ຄົນໄດ້ຮັບສັດທາ ແລະ ປະຈັກພະຍານໄດ້ແນວໃດ?
- ຄຳໝັ້ນສັນຍານີ້ຈະຊ່ອຍໃຫ້ຄົນກັບໃຈ ແລະ ມີຄວາມຮູ້ສຶກໄວຕໍ່ພະວິນຍານໄດ້ແນວໃດ?

ໝາຍເຫດ

## ສະແດງປະຈັກພະຍານເປັນປະຈຳ

ປະຈັກພະຍານຄືພະຍານ ແລະ ຄວາມໝັ້ນໃຈທາງວິນຍານທີ່ໃຫ້ໂດຍພະວິນຍານບໍລິສຸດ. ການສະແດງປະຈັກພະຍານແມ່ນການປະກາດທີ່ງ່າຍ ແລະ ໂດຍກົງກ່ຽວກັບຄວາມເຊື່ອ—ຄວາມຮູ້ສຶກ, ຄວາມໝັ້ນໃຈ, ຄວາມເຊື່ອໝັ້ນກ່ຽວກັບຄວາມຈິງຂອງພະກິດຕິຄຸນ. ການແບ່ງປັນປະຈັກພະຍານເປັນປະຈຳແມ່ນວິທີທີ່ມີພະລັງຫລາຍ ທີ່ຈະເຊື້ອເຊີນພະວິນຍານ ແລະ ຊ່ອຍຄົນອື່ນໆໃຫ້ຮູ້ສຶກພະວິນຍານ. ມັນເພີ່ມພະຍານສ່ວນຕົວຕໍ່ຄວາມຈິງທີ່ທ່ານໄດ້ສອນຈາກພະຄຳພີ. ຜູ້ສອນສາດສະໜາທີ່ໄດ້ຜົນ ຈະສອນ, ເປັນພະຍານ, ແລະ ເຊື້ອເຊີນຄົນອື່ນໆໃຫ້ເຮັດສິ່ງທີ່ຈະສ້າງສັດທາໃນພະເຢຊູຄຣິດ. ນີ້ຮ່ວມດ້ວຍການເຮັດຄຳສັນຍາທີ່ມາຈາກການດຳລົງຊີວິດຕາມຫລັກທຳທີ່ແທ້ຈິງ. ຕົວຢ່າງເຊັ່ນ, ຜູ້ສອນສາດສະໜາຄົນໜຶ່ງອາດຈະເວົ້າວ່າ, "ເຮົາຮູ້ວ່າ ເມື່ອທ່ານຮັກສາວັນຊະບາໂຕໃຫ້ສັກສິດ, ທ່ານຈະພົບຄວາມສະຫງົບໃນຈິດໃຈຂອງທ່ານຫລາຍຂຶ້ນ."

> *"ກ່ຽວກັບປະຈັກພະຍານຂອງຄົນ, ຈົ່ງຈື່ຈຳໄວ້ວ່າ ສິ່ງໃດທີ່ເຂົາແບ່ງປັນຢ່າງເຕັມໃຈ ສິ່ງນັ້ນເຂົາຈະຮັກສາໄວ້, ແຕ່ສິ່ງໃດທີ່ເຂົາຮັກສາໄວຢ່າງເຫັນແກ່ຕົວ ສິ່ງນັ້ນເຂົາຈະເສຍໄປ. . . . ຈົ່ງສອນ ແລະ ສະແດງປະຈັກພະຍານ. ບໍ່ມີການສົມທົບໃດທີ່ດີໄປກວ່ານີ້."*
>
> – ແອວເດີ ທອມມັສ ແອັສ ມອນສັນ
>
> *PATHWAYS TO PERFECTION* [1973], 100–101

ທ່ານຕ້ອງມີຄວາມຈິງໃຈເພື່ອຈະເຮັດໃຫ້ປະຈັກພະຍານຂອງທ່ານມີອຳນາດທີ່ເປັນຕາເຊື່ອ. ປະຈັກພະຍານທີ່ມີພະລັງບໍ່ຂຶ້ນຢູ່ກັບການເວົ້າເກັ່ງ ຫລື ລະດັບສຽງຂອງທ່ານ ແຕ່ມັນຂຶ້ນຢູ່ກັບຄວາມໝັ້ນໃຈຂອງຈິດໃຈຂອງທ່ານ. ຈົ່ງພະຍາຍາມເປັນປະຈຳເພື່ອເຮັດໃຫ້ຄວາມເຂົ້າໃຈ ແລະ ຄວາມໝັ້ນໃຈຂອງທ່ານກ່ຽວກັບຄຳສອນ ແລະ ຫລັກທຳທີ່ທ່ານຕ້ອງສອນເຂັ້ມແຂງຂຶ້ນ. ໃຫ້ສະແດງປະຈັກພະຍານເປັນປະຈຳເພື່ອຢືນຢັນຄວາມຈິງຂອງຫລັກທຳ ຫລື ຄຳສອນທີ່ທ່ານກຳລັງສອນ. ເມື່ອເປັນໄປໄດ້, ໃຫ້ສອນກ່ອນ, ແລ້ວສະແດງປະຈັກພະຍານ, ແລະ ກໍສະແດງປະຈັກພະຍານໃນເວລາທີ່ທ່ານກຳລັງສອນ.



ປະຈັກພະຍານຂອງທ່ານອາດຈະເປັນສິ່ງທີ່ງ່າຍໆ ດັ່ງເຊັ່ນ "ພະເຢຊູຄຣິດເປັນພະບຸດຂອງພະເຈົ້າ" ຫລື "ເຮົາຮູ້ດ້ວຍຕົວເອງວ່າ ພະຄຳພີມໍມອນແມ່ນຄວາມຈິງ." ອີກຢ່າງໜຶ່ງ ທ່ານຄວນແບ່ງປັນປະສົບການກ່ຽວກັບວິທີທີ່ທ່ານໄດ້ຮັບຄວາມຮູ້ນີ້ນຳອີກ. ໃຫ້ສະແດງປະຈັກພະຍານຫລາຍໆເທື່ອໃນແຕ່ລະບົດຮຽນ, ບໍ່ພຽງແຕ່ຕອນສຸດທ້າຍເທົ່ານັ້ນ. ໃຫ້ສະແດງປະຈັກພະຍານວ່າ ສິ່ງທີ່ຄູ່ສອນສາດສະໜາຂອງທ່ານໄດ້ສອນ ແມ່ນມາຈາກພະເຈົ້າ. ໃຫ້ສະແດງປະຈັກພະຍານວ່າ ຫລັກທຳທີ່ທ່ານຈະສອນ ຈະໃຫ້ພອນແກ່ຊີວິດຂອງຜູ້ສົນໃຈຖ້າເຂົາເຈົ້າຈະເຮັດຕາມມັນ. ໃຫ້ເວົ້າກ່ຽວກັບການຮັກສາຫລັກທຳໄດ້ເປັນພອນແກ່ຊີວິດຂອງທ່ານແນວໃດ.

ບາງຄັ້ງ ຄົນອາດຈະສອບຖາມສິ່ງທີ່ທ່ານສອນ, ແຕ່ເປັນສິ່ງຍາກທີ່ຈະສອບຖາມກ່ຽວກັບປະຈັກພະຍານທີ່ຈິງໃຈ ແລະ ສັດຊື່. ເມື່ອທ່ານສະແດງປະຈັກພະຍານ, ໃຫ້ອະທິຖານຂໍໃຫ້ຄົນທີ່ທ່ານກຳລັງສອນຮູ້ສຶກເຖິງພະວິນຍານບໍລິສຸດເຊິ່ງເປັນພະຍານຢືນຢັນ. ເມື່ອທ່ານສະແດງປະຈັກພະຍານ, ທ່ານໄດ້ຊ່ອຍສ້າງສະພາບແວດລ້ອມເພື່ອຜູ້ສົນໃຈຈະສາມາດຮູ້ສຶກເຖິງພະວິນຍານບໍລິສຸດ ທີ່ຢືນຢັນປະຈັກພະຍານຂອງທ່ານກ່ຽວກັບຄວາມຈິງ. ສິ່ງນີ້ຕຽມເຂົາເຈົ້າເພື່ອຈະຍອມຮັບເອົາຄຳໝັ້ນສັນຍາທີ່ທ່ານຈະເຊື້ອເຊີນໃຫ້ເຂົາເຈົ້າເຮັດ.

ທ່ານບະລິກຳ ຢັງ ບໍ່ໄດ້ຮັບບັບຕິດສະມາເຂົ້າຮ່ວມໃນສາດສະໜາຈັກຂອງພະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍລະຫວ່າງປີທຳອິດຕອນເພິ່ນຮຽນຮູ້ພະກິດຕິຄຸນ. ແຕ່ຍ້ອນການປ່ຽນໃຈຂອງເພິ່ນ, ເພິ່ນໄດ້ກ່າວວ່າ: "ຖ້າວ່າທຸກໆພອນສະຫວັນ, ການຮູ້ຈັກກາລະເທສະ, ສະຕິປັນຍາ, ແລະ ຄວາມສະຫງ່າງາມຂອງໂລກນີ້ໄດ້ຖືກສົ່ງມາຫາຂ້າພະເຈົ້າ

ໝາຍເຫດ

ພ້ອມກັນກັບພະຄຳພີມໍມອນ, ແລະ ປະກາດຄວາມຈິງຂອງມັນດ້ວຍຄວາມເວົ້າທີ່ຈັບໃຈທີ່ສູງສຸດໃນໂລກ, ທີ່ພະຍາຍາມຈະພິສູດມັນດ້ວຍຄວາມຮູ້ ແລະ ປັນຍາທາງໂລກ, ສິ່ງນີ້ເປັນຄືກັນກັບຄວັນທີ່ເລື່ອນຂຶ້ນສູງ ແລ້ວຫາຍໄປເທົ່ານັ້ນສຳລັບຂ້າພະເຈົ້າ. ແຕ່ເວລາຂ້າພະເຈົ້າເຫັນຊາຍຄົນໜຶ່ງທີ່ເວົ້າບໍ່ເກັ່ງ ຫລື ບໍ່ມີພອນສະຫວັນໃນການເວົ້າຕໍ່ໜ້າຄົນ, ຜູ້ທີ່ສາມາດເວົ້າໄດ້ພຽງແຕ່ວ່າ 'ເຮົາຮູ້ໂດຍອຳນາດຂອງພະວິນຍານບໍລິສຸດວ່າ ພະຄຳພີມໍມອນແມ່ນຄວາມຈິງ, ວ່າ ໂຢເຊັບ ສະມິດ ເປັນສາດສະດາຂອງພະຜູ້ເປັນເຈົ້າ,' ພະວິນຍານບໍລິສຸດ ທີ່ມາຈາກຄົນນັ້ນເຮັດໃຫ້ຄວາມຮູ້ຂອງຂ້າພະເຈົ້າແຈ່ມແຈ້ງຂຶ້ນ, ແສງສະຫວ່າງ, ລັດສະໝີພາບ, ແລະ ຄວາມເປັນອຳມະຕະໄດ້ຢູ່ຕໍ່ໜ້າຂ້າພະເຈົ້າ. ສິ່ງເຫລົ່ານີ້ອ້ອມຮອບຂ້າພະເຈົ້າ, ເຮັດໃຫ້ຂ້າພະເຈົ້າເຕັມໄປດ້ວຍມັນ, ແລະ ຂ້າພະເຈົ້າຮູ້ດ້ວຍຕົວເອງວ່າ ປະຈັກພະຍານຂອງຊາຍຄົນນັ້ນແມ່ນຄວາມຈິງ" (in *Journal of Discourses*, 1:90).

### ກິດຈະກຳ: ການສຶກສາສ່ວນຕົວ

ຂໍ້ພະຄຳພີຂ້າງລຸ່ມນີ້ເປັນຕົວຢ່າງຂອງການສະແດງປະຈັກພະຍານ. ໃຫ້ອ່ານຄຳຖາມ ແລະ ຂໍ້ພະຄຳພີແຕ່ລະຂໍ້. ໃຫ້ຂຽນຄຳຕອບຂອງທ່ານໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

- ໃນຂໍ້ພະຄຳພີເຫລົ່ານີ້, ອັກຄະສາວົກ ແລະ ສາດສະດາໄດ້ເປັນພະຍານກ່ຽວກັບຫຍັງ?
- ເຂົາເຈົ້າເຊື່ອຫລາຍປານໃດກ່ຽວກັບສິ່ງທີ່ເຂົາເຈົ້າເວົ້າ? ທ່ານບອກໄດ້ແນວໃດວ່າເຂົາເຈົ້າໝັ້ນໃຈກ່ຽວກັບຄວາມຈິງ?
- ເມື່ອທ່ານເວົ້າວ່າ, "ເຮົາຮູ້ວ່າ __________ ແມ່ນຄວາມຈິງ," ທ່ານໝາຍຄວາມວ່າແນວໃດ? ມີຄຳອື່ນອັນໃດແດ່ທີ່ທ່ານສາມາດໃຊ້ເພື່ອສະແດງເຖິງຄວາມເຊື່ອໝັ້ນຂອງທ່ານ?

Jacob 7:7–12
D&C 76:22–24
ກິດຈະການ 2:14–38
ແອລະມາ 5:45–48
ໂຢຮັນ 3:3–11
ກິດຈະການ 10:34–44
ແອລະມາ 34:1, 8

### ການສຶກສາພະຄຳພີ

**ມີຫລັກທຳ ແລະ ຄຳສັນຍາອັນໃດແດ່ກ່ຽວກັບການສະແດງປະຈັກພະຍານ?**

2 ນີໄຟ 33:1
D&C 84:61
ໂຢຮັນ 15:26
D&C 62:3
D&C 100:5–8

## ຕິດຕາມຜົນຕໍ່ໄປ

ການເຊື້ອເຊີນປາດສະຈາກການຕິດຕາມຜົນຕໍ່ໄປ ຄືກັນກັບການເລີ່ມຕົ້ນເດີນທາງ ແຕ່ບໍ່ໄປຮອດຈຸດໝາຍປາຍທາງ ຫລື ຊື້ປີ້ໄປເບິ່ງການສະແດງດົນຕີແຕ່ບໍ່ໄດ້ເຂົ້າໄປໃນໂຮງລະຄອນ. ປາດສະຈາກການເຮັດໃຫ້ແລ້ວ, ຄຳໝັ້ນສັນຍາກໍບໍ່ມີຄວາມໝາຍ.

ການປ່ຽນແປງອາດຈະເປັນສິ່ງທີ່ຍາກ. ບົດບາດຂອງທ່ານຄື ຊ່ອຍເຫລືອຄົນໃຫ້ຕັ້ງໃຈໃນການປ່ຽນແປງຂອງເຂົາເຈົ້າ. ທ່ານຄວນເຮັດທຸກສິ່ງທຸກຢ່າງທີ່ທ່ານສາມາດເຮັດໄດ້ ເພື່ອຊ່ອຍເຫລືອຄົນໃຫ້ຮັກສາຄຳໝັ້ນສັນຍາຂອງເຂົາເຈົ້າ.

ການກັບໃຈທີ່ແທ້ຈິງຕ້ອງສະແດງອອກໂດຍການກະທຳທີ່ຊອບທຳເປັນເວລາດົນນານ, ໂດຍສະເພາະກ່ຽວກັບພະບັນຍັດດັ່ງເຊັ່ນ ກົດພົມມະຈັນ, ພະວາຈາແຫ່ງປັນຍາ, ແລະ ກົດເງິນສ່ວນສິບ. ເມື່ອທ່ານ ແລະ ຜູ້ນຳໃນຫວອດຊ່ອຍຄົນໃຫ້ຮັກສາຄຳໝັ້ນສັນຍາຂອງເຂົາເຈົ້າ, ໃຫ້ສະແດງຄວາມເຂົ້າໃຈ. ໃຫ້ອົດທົນແຕ່ບໍ່ຍອມທໍ້ຖອຍ. ວຽກງານການເຜີຍແຜ່ຂອງທ່ານບໍ່ສຳເລັດຜົນຈົນກວ່າຜູ້ສົນໃຈໄດ້ດຳລົງຊີວິດຕາມຄຳໝັ້ນສັນຍາເຫລົ່ານີ້, ຫລື ອີກປະການໜຶ່ງ, ຈົນກວ່າເຂົາເຈົ້າໄດ້ກັບໃຈ (ເບິ່ງ 3 ນີໄຟ 18:32). ບາງຄັ້ງທ່ານຈຳເປັນຕ້ອງໄປຢ້ຽມຢາມຫລາຍເທື່ອ ເພື່ອຊ່ອຍໃຫ້ເຂົາເຈົ້າພັດທະນາສັດທາທີ່ເຂັ້ມແຂງພໍ ໃນຫລັກທຳເພື່ອຈະນຳໄປສູ່ການກັບໃຈ.

ໝາຍເຫດ

ການຕິດຕາມຜົນຕໍ່ໄປ ເລີ່ມຕົ້ນເມື່ອທ່ານໄປຢ້ຽມຢາມ ແລະ ສອນຜູ້ຄົນຄັ້ງທໍາອິດ:

- ໃຫ້ເຂົາເຈົ້າຂຽນຄໍາໝັ້ນສັນຍາໄວ້ໃນສິ່ງໃດສິ່ງໜຶ່ງທີ່ທ່ານມອບໃຫ້ເຂົາເຈົ້າ, ດັ່ງເຊັ່ນ ປຶ້ມນ້ອຍ ຫລື ນາມບັດທີ່ມີຊື່ ແລະ ເລກໂທລະສັບຂອງທ່ານ.
- ໃຫ້ແນ່ໃຈວ່າ ເຂົາເຈົ້າຮູ້ວ່າທ່ານຈະແວ່ມາຢ້ຽມຢາມເຂົາເຈົ້າບົດໜຶ່ງເປັນປະຈໍາ ລະຫວ່າງການນັດໝາຍສອນ. ອະທິບາຍວ່າ ຈຸດປະສົງຂອງທ່ານແມ່ນເພື່ອສະໜັບສະໜູນ ແລະ ຊ່ອຍເຫລືອເຂົາເຈົ້າ. ບອກເຂົາເຈົ້າກ່ຽວກັບສິ່ງທີ່ທ່ານຈະເຮັດລະຫວ່າງການຢ້ຽມຢາມເຫລົ່ານັ້ນ.
- ຂຽນໝາຍເຫດພິເສດໄວ້ໃນກ້ອງຫົວຂໍ້ ໝາຍເຫດ/ສິ່ງທີ່ຕ້ອງເຮັດ ໃນປຶ້ມປະຕິທິນປະຈໍາວັນຂອງທ່ານ ເພື່ອມື້ອື່ນທ່ານຈະໄດ້ຕິດຕາມຜົນຕໍ່ໄປ ກ່ຽວກັບການເຊື້ອເຊີນໃຫ້ເຮັດຄໍາໝັ້ນສັນຍາທີ່ທ່ານໄດ້ສະເໜີໄວ້ໃນມື້ນີ້.

ໃຫ້ຕິດຕໍ່ຜູ້ສົນໃຈເປັນປະຈໍາ, ທຸກໆມື້ຖ້າເປັນໄປໄດ້, ເພື່ອຈະຮູ້ວ່າເຂົາເຈົ້າກ້າວໜ້າແນວໃດໃນຄໍາໝັ້ນສັນຍາຂອງເຂົາເຈົ້າ, ຕອບຄໍາຖາມ, ຊ່ອຍເຂົາເຈົ້າໃຫ້ເອົາຊະນະສິ່ງທ້າທາຍ, ສອນບົດຮຽນເພີ່ມອີກ, ອ່ານນໍາກັນຈາກພະຄໍາພີມໍມອນ, ແບ່ງປັນຂໍ້ພະຄໍາພີ, ຫລື ໃຊ້ອຸປະກອນທາງສຽງ ແລະ ພາບ. ເມື່ອທ່ານໄປຢ້ຽມຢາມເຂົາເຈົ້າເປັນປະຈໍາ, ທ່ານຈະເຮັດໃຫ້ຄວາມຮູ້ສຶກທາງວິນຍານຂອງເຂົາເຈົ້າ ທີ່ເຂົາເຈົ້າໄດ້ຮູ້ສຶກເມື່ອທ່ານສອນເຂົາເຈົ້າກ່ຽວກັບຂ່າວສານຂອງການຟື້ນຟູຂອງພະກິດຕິຄຸນຂອງພະເຢຊູຄຣິດເຂັ້ມແຂງຂຶ້ນ. ອິດທິພົນຂອງພະວິນຍານທີ່ສະໜັບສະໜູນນີ້ເປັນສິ່ງສໍາຄັນ. ບາງຄັ້ງທ່ານອາດຈະຕິດຕໍ່ຫາຜູ້ສົນໃຈເພື່ອເຕືອນ ແລະ ຊຸກຍູ້ເຂົາເຈົ້າໃຫ້ຮັກສາຄໍາໝັ້ນສັນຍາ.

ຊ່ອຍເຫລືອຜູ້ສົນໃຈໃຫ້ຮູ້ຈັກພອນທີ່ເຂົາເຈົ້າໄດ້ຮັບເມື່ອເຂົາເຈົ້າຮັກສາຄໍາໝັ້ນສັນຍາ. ໂດຍສະເພາະແລ້ວ ໃຫ້ຊ່ອຍເຫລືອເຂົາເຈົ້າໃຫ້ບັນລະຍາຍເຖິງຄວາມຮູ້ສຶກຂອງເຂົາເຈົ້າ ເມື່ອພະວິນຍານເປັນພະຍານເຖິງຄວາມຈິງຂອງຂ່າວສານຂອງທ່ານ.

ຍ້ອງຍໍ ແລະ ຊຸກຍູ້ຄົນທີ່ກໍາລັງປະສົບຜົນສໍາເລັດໃນການຮັກສາຄໍາໝັ້ນສັນຍາ. ຜູ້ສົນໃຈກໍາລັງປ່ຽນແປງຊີວິດຂອງເຂົາເຈົ້າ. ເຂົາເຈົ້າຕ້ອງຮຽນຮູ້ ແລະ ເຮັດຫລາຍສິ່ງຫລາຍຢ່າງ. ຍົກຍ້ອງເຂົາເຈົ້າຢ່າງຈິງໃຈເລື້ອຍໆ. ສະແດງຄວາມຮູ້ບຸນຄຸນຂອງທ່ານສໍາລັບຄວາມກ້າວໜ້າຂອງເຂົາເຈົ້າ ແລະ ຄວາມໝັ້ນໃຈຂອງທ່ານວ່າ ເຂົາເຈົ້າສາມາດເຮັດໃຫ້ສໍາເລັດ. ຊຸກຍູ້ເຂົາເຈົ້າເວລາໃດກໍຕາມທີ່ທ່ານຢູ່ນໍາເຂົາເຈົ້າ.

ສະແດງຄວາມເປັນຫ່ວງ ແລະ ຄວາມຜິດຫວັງເມື່ອເຂົາເຈົ້າບໍ່ຮັກສາຄໍາໝັ້ນສັນຍາ ແລະ ບໍ່ໄດ້ຮັບພອນ.

### ກິດຈະກໍາ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ

ໃນປຶ້ມວາງແຜນປະຈໍາວັນຂອງທ່ານ ໃຫ້ຂຽນແຜນຂອງທ່ານສໍາລັບການຕິດຕໍ່ປະຈໍາວັນນໍາຜູ້ສົນໃຈ ແຕ່ລະຄົນ. ວາງແຜນລ່ວງໜ້າສິ່ງທີ່ທ່ານຈະເຮັດ ເພື່ອຕິດຕາມຜົນຕໍ່ໄປນໍາຜູ້ສົນໃຈ.

---

ເລືອກຄໍາໝັ້ນສັນຍາຂໍ້ໜຶ່ງທີ່ທ່ານຈະເຊື້ອເຊີນໃຫ້ເຮັດເມື່ອທ່ານສອນບົດຮຽນ. ຫລັງຈາກນັ້ນ ໃຫ້ບອກເຖິງຄວາມເປັນຫ່ວງຕ່າງໆ ເຊິ່ງອາດເປັນອຸປະສັກຕໍ່ບາງຄົນໃນການຍອມຮັບ ຫລື ຮັກສາຄໍາໝັ້ນສັນຍານັ້ນ. ສົນທະນາ ແລະ ຝຶກວິທີທີ່ທ່ານຈະສາມາດຊ່ອຍເຫລືອຄົນໄດ້ດີທີ່ສຸດ ເມື່ອເຂົາເຈົ້າພະຍາຍາມແກ້ໄຂຄວາມເປັນຫ່ວງຂອງເຂົາເຈົ້າ.

### ໃຫ້ຈື່ຈໍາສິ່ງນີ້:

- ຕັ້ງໃຈໃສ່ຕໍ່ການເຊື້ອເຊີນຄົນໃຫ້ເຮັດຄໍາໝັ້ນສັນຍາໃນທຸກໆສະພາບການຂອງການຊອກຫາຄົນ ຫລື ໃນການສອນ ນໍາທັງຄົນທີ່ບໍ່ເປັນ ຫລື ເປັນສະມາຊິກຂອງສາດສະໜາຈັກ.
- ສະເໜີການເຊື້ອເຊີນໃຫ້ເຮັດຄໍາໝັ້ນສັນຍາເພື່ອຊ່ອຍເຫລືອຄົນໃຫ້ປະສົບການປ່ຽນແປງ.
- ສັນຍາວ່າເຂົາເຈົ້າຈະໄດ້ຮັບພອນ.
- ສະແດງປະຈັກພະຍານ.
- ຕິດຕາມຜົນຕໍ່ໄປເພື່ອຊ່ອຍເຫລືອຄົນໃຫ້ຮັກສາຄໍາໝັ້ນສັນຍາ.

ໝາຍເຫດ

# ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

## ການສຶກສາສ່ວນຕົວ

- ຂອກຫາພະບັນຍັດທີ່ມີຢູ່ໃນບົດຮຽນທີ 4 ຫລື ທີ 5. ໃຫ້ຄິດເຖິງພອນທີ່ທ່ານໄດ້ຮັບຈາກການເຊື່ອຟັງພະບັນຍັດນີ້, ແລະ ຂຽນພອນນີ້ໄວ້ໃນປຶ້ມບັນທຶກປະຈຳວັນຂອງທ່ານ.

- ໃນຈົດໝາຍ, ໃຫ້ຖາມຄອບຄົວຂອງທ່ານວ່າ ເຂົາເຈົ້າໄດ້ຮັບພອນແນວໃດຈາກການເຊື່ອຟັງພະບັນຍັດຂໍ້ນັ້ນ (ຕົວຢ່າງເຊັ່ນ, ເງິນສ່ວນສິບ).

- ຂຽນຄວາມຮູ້ສຶກຂອງທ່ານກ່ຽວກັບການສະເໜີໃຫ້ເຮັດຄຳໝັ້ນສັນຍາ. ທ່ານກ້າຫານ ຫລື ຂີ້ອາຍ? ທ່ານໝັ້ນໃຈວ່າຄົນຈະໄດ້ຮັບພອນບໍ, ຫລື ທ່ານມີຄວາມສົງໄສ? ທ່ານມີຄວາມສະໝ່ຳສະເໝີ, ຄວາມອົດທົນ, ແລະ ຊ່ອຍເຫລືອຄົນເມື່ອທ່ານຕິດຕໍ່ກັບເຂົາເຈົ້າທຸກມື້ບໍ? ຜູ້ສົນໃຈຮູ້ບໍ່ວ່າທ່ານຮັກເຂົາເຈົ້າ? ທ່ານຈະແກ້ໄຂ ຄວາມອ່ອນແອທີ່ທ່ານເຫັນຢູ່ໃນການເຊື້ອເຊີນຂອງທ່ານແນວໃດ?

- ທົບທວນແຜນບົດຮຽນສຳລັບແຕ່ລະບົດຮຽນ. ທ່ານຮ່ວມຄຳໝັ້ນສັນຍາຈຳເພາະບໍ? ແຜນບົດຮຽນຂອງທ່ານນຳພາຄົນຢ່າງແຈ່ມແຈ້ງໃຫ້ເຮັດຄຳໝັ້ນສັນຍາບໍ?

## ການສຶກສາກັບຄູ່ສອນສາດສະໜາ

- ຈາກ ປຶ້ມວາງແຜນປະຈຳວັນຂອງທ່ານ, ໃຫ້ຂຽນລາຍຊື່ຄົນທີ່ທ່ານໄດ້ຕິດຕໍ່ໃນສອງມື້ທີ່ຜ່ານມາໃສ່, ຮ່ວມດ້ວຍ ຜູ້ສົນໃຈ ແລະ ສະມາຊິກ. ສຳລັບແຕ່ລະຄົນ, ໃຫ້ຂຽນຄຳໝັ້ນສັນຍາທີ່ເຂົາເຈົ້າໄດ້ເຮັດ ແລະ ການເຊື້ອເຊີນອື່ນໆທີ່ທ່ານສາມາດສະເໜີ ຫລື ຄວນສະເໜີ. ສົນທະນາກ່ຽວກັບເຫດຜົນທີ່ທ່ານສາມາດໄດ້ຮັບຄຳໝັ້ນສັນຍາຈາກຄົນບາງຄົນ ແລະ ກ່ຽວກັບສິ່ງໃດທີ່ກີດກັນທ່ານບໍ່ໃຫ້ໄດ້ຮັບຄຳໝັ້ນສັນຍາຈາກຄົນອື່ນໆ. ທ່ານຈະເຮັດຫຍັງແດ່ເພື່ອຈະຕິດຕາມຜົນຕໍ່ໄປກ່ຽວກັບຄຳໝັ້ນສັນຍາເຫລົ່ານີ້?

- ເບິ່ງ ປຶ້ມວາງແຜນປະຈຳວັນຂອງທ່ານ, ແລະ ຂຽນຊື່ຂອງຜູ້ສົນໃຈທີ່ທ່ານຈະສອນມື້ອື່ນ ຫລື ມື້ຮືໃສ່. ພິຈາລະນາວ່າທ່ານຈະເຊື້ອເຊີນເຂົາເຈົ້າໃຫ້ດຳລົງຊີວິດຕາມພະບັນຍັດຂໍ້ໃດທີ່ມີຢູ່ໃນບົດຮຽນທີ 4 ແລະ ທີ 5. ສົນທະນາວິທີທີ່ທ່ານຈະສະເໜີການເຊື້ອເຊີນ ແລະ ພອນອັນແນ່ນອນທີ່ທ່ານຈະສັນຍາສຳລັບການເຊື່ອຟັງ.

- ພິຈາລະນາທີ່ຈະສະແດງບັນທຶກການສອນນຳຜູ້ສົນໃຈ ເພື່ອໃຫ້ເຂົາເຈົ້າຮູ້ເຖິງສິ່ງທີ່ທ່ານຄາດຫວັງຈາກເຂົາເຈົ້າ. ຖ້າເໝາະສົມ, ໃຫ້ເອົາບັນທຶກການສອນໃຫ້ເຂົາເຈົ້າເບິ່ງ.

- ທົບທວນກ້ອງຫົວຂໍ້ ໝາຍເຫດ/ສິ່ງທີ່ຕ້ອງເຮັດ ໃນປຶ້ມປະຕິທິນຂອງທ່ານສຳລັບສາມມື້ທີ່ຜ່ານມາ ເພື່ອເບິ່ງວ່າທ່ານໄດ້ຂຽນວຽກທີ່ຈະເຮັດ ເພື່ອຕິດຕາມຜົນຂອງການເຊື້ອເຊີນແຕ່ລະເທື່ອທີ່ທ່ານໄດ້ສະເໜີໄປນັ້ນຫລືບໍ່.

## ການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດ

- ສົນທະນາຄວາມຄິດທີ່ໄດ້ຜົນ ແລະ ປະດິດຄິດສ້າງເພື່ອຕິດຕໍ່ນຳຜູ້ສົນໃຈທຸກວັນ. ຜູ້ສອນສາດສະໜາຈະເຮັດວຽກງານນຳສະມາຊິກຢ່າງມີຜົນໄດ້ແນວໃດ? ອຸບປະກອນຊະນິດເປັນສຽງ ແລະ ຮູບພາບອັນໃດແດ່ທີ່ເປັນປະໂຫຍດ? ທ່ານຈະເຮັດແນວໃດເມື່ອຄົນບໍ່ຢູ່ບ້ານ ຫລື ບໍ່ມີເວລາທີ່ຈະພົບກັບທ່ານ?

ໝາຍເຫດ

- ສົນທະນາວິທີທີ່ຜູ້ສອນສາດສະໜາໄດ້ສອນພະບັນຍັດທີ່ມີຢູ່ໃນບົດຮຽນທີ 4 ແລະ ທີ 5 ຢ່າງໄດ້ຜົນ.

- ສົນທະນາຄວາມເປັນຫ່ວງຕ່າງໆຂອງຜູ້ສົນໃຈປະຈຸບັນ. ຄວາມເປັນຫ່ວງເຫລົ່ານີ້ແມ່ນຫຍັງ? ຜູ້ສອນສາດສະໜາສາມາດເຮັດຫຍັງໄດ້ແດ່ເພື່ອແກ້ໄຂຄວາມເປັນຫ່ວງຂອງເຂົາເຈົ້າ?

## ປະທານເຜີຍແຜ່

- ບາງຄັ້ງບາງຄາວ ໃຫ້ໄປນຳຜູ້ສອນສາດສະໜາເມື່ອເຂົາເຈົ້າສອນ. ຊ່ອຍໃຫ້ເຂົາເຈົ້າຕັ້ງໃຈໃສ່ຕໍ່ການຊ່ອຍເຫລືອຄົນໃຫ້ເຮັດ ແລະ ຮັກສາຄຳໝັ້ນສັນຍາ.

- ສະໜັບສະໜູນຜູ້ນຳຖານະປະໂລຫິດ ແລະ ສະມາຊິກທັງຫລາຍໃຫ້ເຂົ້າຮ່ວມໃນການຕິດຕໍ່ນຳຜູ້ສົນໃຈທຸກໆມື້.

- ໃຫ້ເປັນຕົວຢ່າງໃນການສະເໜີການເຊື້ອເຊີນໃນວຽກງານເຜີຍແຜ່ຂອງທ່ານ ແລະ ນຳຜູ້ສອນສາດສະໜາທີ່ທ່ານຮັບໃຊ້.

ໝາຍເຫດ



# ເຮົາຈະຕຽມຄົນເພື່ອຮັບບັບຕິດສະມາ ແລະ ຮັບການຢືນຢັນໄດ້ແນວໃດ?

ໝາຍເຫດ

**ໃຫ້ພິຈາລະນາເລື່ອງນີ້**

- ເຮົາຕ້ອງເຮັດແນວໃດໃນການຕຽມຄົນເພື່ອຮັບບັບຕິດສະມາ ແລະ ຮັບການຢືນຢັນ?
- ເຮົາຈະດຳເນີນການສຳພາດກ່ອນບັບຕິດສະມາຢ່າງໄດ້ຜົນໄດ້ແນວໃດ?
- ພິທີຮັບບັບຕິດສະມາທີ່ມີພະວິນຍານສະຖິດຢູ່ນຳ ຖືກວາງແຜນ ແລະ ດຳເນີນການແນວໃດ?
- ເຮົາຈະປະສານງານກັບອະທິການຢ່າງໃກ້ຊິດແນວໃດເພື່ອໃຫ້ແນ່ໃຈວ່າຜູ້ປ່ຽນໃຈເຫລື້ອມໃສຈະໄດ້ຮັບການຢືນຢັນ?
- ເປັນຫຍັງມັນຈຶ່ງເປັນສິ່ງສຳຄັນທີ່ເຮົາຈະບັນທຶກການຮັບບັບຕິດສະມາ ແລະ ການຢືນຢັນໃຫ້ຄົບຖ້ວນ?

## ຕຽມພ້ອມຄົນເພື່ອຮັບບັບຕິດສະມາ ແລະ ການຢືນຢັນ

ຈຸດປະສົງຂອງການສອນຂອງທ່ານແມ່ນເພື່ອຊ່ອຍເຫລືອຄົນອື່ນໆໃຫ້ພັດທະນາສັດທາໃນພະເຢຊູຄຣິດ ແລະ ກັບໃຈຈາກບາບຂອງເຂົາເຈົ້າ. ດັ່ງທີ່ມໍມອນໄດ້ສອນ, "ຜົນທຳອິດຂອງການກັບໃຈຄືບັບຕິດສະມາ" (ໂມໂລໄນ 8:25). ການສຳພາດກ່ອນບັບຕິດສະມາແມ່ນວິທີທີ່ໄດ້ຈັດຕັ້ງຂຶ້ນໂດຍສາດສະໜາຈັກ ເພື່ອໃຫ້ແນ່ໃຈວ່າ ຜູ້ສະໝັກແຕ່ລະຄົນໄດ້ເຮັດຕາມມາດຕະຖານຂອງພະເຈົ້າ ສຳລັບການຮັບບັບຕິດສະມາ ແລະ ໄດ້ຕຽມພ້ອມເພື່ອຈະຮັບຂອງປະທານແຫ່ງພະວິນຍານບໍລິສຸດ. ຜ່ານການສຳພາດນີ້, ຜູ້ສະໝັກຮັບບັບຕິດສະມາໄດ້ປະຕິບັດຕາມເງື່ອນໄຂທີ່ມີຢູ່ໃນພະຄຳພີວ່າເຂົາເຈົ້າເປັນພະຍານຕໍ່ໜ້າຕົວແທນທີ່ໄດ້ຮັບອະນຸຍາດຈາກສາດສະໜາຈັກວ່າ ເຂົາເຈົ້າໄດ້ກັບໃຈຢ່າງແທ້ຈິງຈາກບາບທັງໝົດຂອງເຂົາເຈົ້າ (see D&C 20:37). ຄຳໝັ້ນສັນຍາທີ່ຜູ້ສົນໃຈເຮັດ ໄດ້ຕຽມເຂົາເຈົ້າໃຫ້ເຮັດ ແລະ ຮັກສາພັນທະສັນຍາແຫ່ງການຮັບບັບຕິດສະມາ. ຄົນທີ່ໄດ້ຮັກສາຄຳໝັ້ນສັນຍາທີ່ທ່ານເຊື້ອເຊີນໃຫ້ເຂົາເຈົ້າເຮັດ ຈະຕຽມພ້ອມຢ່າງດີເພື່ອການສຳພາດ ແລະ ເພື່ອການເປັນສະມາຊິກ ແລະ ການຮ່ວມໃນກິດຈະກຳທັງຫລາຍຂອງສາດສະໜາຈັກ.

© 1988 Greg K. Olsen. Courtesy Mill Pond Press and Dr. Gerry Hooper. ຫ້າມລອກແບບ.

ໝາຍເຫດ

ເມື່ອທ່ານສອນຜູ້ສົນໃຈ ແລະ ຕຽມເຂົາເຈົ້າເພື່ອຮັບບັບຕິດສະມາ ແລະ ຮັບການຢືນຢັນ, ໃຫ້ແນ່ໃຈວ່າ ເຂົາເຈົ້າເຮັດຕາມຄຸນສົມບັດສຳລັບການຮັບບັບຕິດສະມາ.

## ຄຸນສົມບັດສຳລັບການຮັບບັບຕິດສະມາ

**Doctrine and Covenants 20:37:**

- ຖ່ອມຕົວຕໍ່ພະພັກຂອງພະເຈົ້າ.
- ປາດຖະໜາທີ່ຈະຮັບບັບຕິດສະມາ.
- ມາສູ່ດ້ວຍໃຈທີ່ຊອກຊ້ຳ ແລະ ວິນຍານທີ່ສຳນຶກຜິດ.
- ກັບໃຈຈາກບາບທັງໝົດຂອງເຂົາເຈົ້າ.
- ເຕັມໃຈທີ່ຈະຮັບເອົາພະນາມຂອງພະຄິດ.
- ຕັ້ງໃຈທີ່ຈະຮັບໃຊ້ພະຄິດຈົນເຖິງທີ່ສຸດ.
- ສະແດງໂດຍການກະທຳຂອງເຂົາເຈົ້າວ່າ ເຂົາເຈົ້າໄດ້ຮັບພະວິນຍານຂອງພະຄິດໄວ້ ຈົນວ່າໄດ້ຮັບການປົດບາບຂອງເຂົາເຈົ້າ.

**ຝ່າຍປະທານສູງສຸດ ແລະ ສະພາອັກຄະສາວົກສິບສອງ:**

- ເຮັດການປ່ຽນແປງຢ່າງພຽງພໍໃນຊີວິດຂອງເຂົາເຈົ້າເພື່ອຈະມີຄຸນສົມບັດຕາມທີ່ໄດ້ບັນຊາໄວ້ໃນ Doctrine and Covenants 20:37.
- ພັດທະນາສັດທາໃນພະຄິດ.
- ກັບໃຈຈາກການລ່ວງລະເມີດ.
- ດຳລົງຊີວິດຕາມຫລັກທຳຂອງການມີຄ່າຄວນທາງສິນທຳ.
- ດຳລົງຊີວິດຕາມພະວາຈາແຫ່ງປັນຍາ.
- ເຮັດຄຳໝັ້ນສັນຍາທີ່ຈະຈ່າຍເງິນສ່ວນສິບ
- ຮຽນບົດຮຽນຂອງຜູ້ສອນສາດສະໜາທັງໝົດ [ບົດຮຽນ 1–4 ໃນ ບັນທຶກການສອນ ແລະ ຄຳໝັ້ນສັນຍາທີ່ກ່ຽວພັນກັນນັ້ນ].
- ພົບກັບອະທິການ ຫລື ປະທານສາຂາ.
- ເຂົ້າຮ່ວມກອງປະຊຸມສິນລະລຶກຫລາຍໆເທື່ອ.

("Statement on Missionary Work," First Presidency letter, 11 Dec. 2002)

ເມື່ອຜູ້ສົນໃຈຕັ້ງວັນທີ່ຈະຮັບບັບຕິດສະມາຢ່າງແນ່ນອນ, ໃຫ້ຈັດເວລາທີ່ທ່ານຈະເຮັດສິ່ງອື່ນໆທີ່ຈະນຳໄປສູ່ການຮັບບັບຕິດສະມາ ແລະ ຮັບການຢືນຢັນ ເຊິ່ງໄດ້ບົ່ງໄວ້ໃນປຶ້ມວາງແຜນປະຈຳວັນຂອງທ່ານໃຫ້ແລ້ວ. ທົບທວນບັນທຶກການສອນຢ່າງຖ້ວນຖີ່ເພື່ອໃຫ້ແນ່ໃຈວ່າ ທ່ານໄດ້ສອນຄຳສອນພື້ນຖານ ແລະ ວ່າຜູ້ສົນໃຈຕຽມພ້ອມທີ່ຈະຕອບຄຳຖາມແຕ່ລະຂໍ້ໃນການສຳພາດກ່ອນບັບຕິດສະມາ. ທົບທວນຕາຕະລາງລາຍການນີ້ກັບຜູ້ສົນໃຈໃນການນັດພົບເທື່ອໜ້າຂອງທ່ານ. ຖ້າເປັນໄປໄດ້, ຜູ້ສົນໃຈຄວນໄປຮ່ວມພິທີຮັບບັບຕິດສະມາຂອງຄົນອື່ນ ກ່ອນທີ່ເຂົາເຈົ້າຈະຮັບບັບຕິດສະມາ.

ຖ້າທ່ານຄິດວ່າຄົນທີ່ທ່ານສອນຕ້ອງການຕຽມພ້ອມຕື່ມອີກ, ຢ່ານັດການສຳພາດຈົນກວ່າຜູ້ສົນໃຈຈະເຮັດຕາມມາດຕະຖານເສຍກ່ອນ. ຖ້າຜູ້ສົນໃຈຍັງເປັນເດັກຢູ່, ໃຫ້ແນ່ໃຈວ່າພໍ່ແມ່ ຫລື ຜູ້ປົກຄອງໄດ້ໃຫ້ການອະນຸຍາດ, ດີແທ້ແມ່ນໃຫ້ເປັນລາຍລັກອັກສອນ, ເພື່ອເຂົາເຈົ້າຈະໄດ້ຮັບບັບຕິດສະມາ.

ເມື່ອທ່ານຊ່ວຍເຫລືອຜູ້ຄົນໃຫ້ຕຽມພ້ອມເພື່ອການສຳພາດກ່ອນບັບຕິດສະມາ, ໃຫ້ເວົ້າລົມນຳເຂົາເຈົ້າກ່ຽວກັບຈຸດປະສົງຂອງການສຳພາດ. ສອນເຂົາເຈົ້າ ແລະ ສະແດງປະຈັກພະຍານກ່ຽວກັບຄວາມສັກສິດຂອງການຮັບບັບຕິດສະມາ ແລະ ການຮັບຂອງປະທານແຫ່ງພະວິນຍານບໍລິສຸດ. ອະທິບາຍວ່າ ທ່ານຢາກໃຫ້ແນ່ໃຈວ່າ ເຂົາເຈົ້າເຂົ້າໃຈຫລັກທຳທີ່ທ່ານໄດ້

ສອນ ແລະ ພັນທະສັນຍາທີ່ເຂົາເຈົ້າຈະເຮັດ. ອະທິບາຍອີກວ່າ ການສຳພາດເປັນໂອກາດທີ່ເຂົາເຈົ້າຈະເປັນພະຍານຕໍ່ໜ້າຕົວແທນຂອງພະຜູ້ເປັນເຈົ້າ ວ່າເຂົາເຈົ້າຕຽມພ້ອມສຳລັບພິທີການອັນສັກສິດເຫລົ່ານີ້. ເມື່ອເຂົາເຈົ້າຮັກສາພັນທະສັນຍາທີ່ໄດ້ເຮັດໄວ້ຕອນທີ່ຮັບບັບຕິດສະມາ ແລະ ຮັບການຢືນຢັນ, ເຂົາເຈົ້າຈະໄດ້ຮັບການປົດບາບ. ບອກຄຳຖາມທີ່ຜູ້ດຳເນີນການສຳພາດຈະຖາມກ່ຽວກັບຄວາມເຊື່ອຂອງເຂົາເຈົ້າໃນຄຳສອນທີ່ສຳຄັນ, ການກັບໃຈຈາກບາບໃນອາດີດ, ແລະ ຄວາມເຕັມໃຈຂອງເຂົາເຈົ້າຕໍ່ພັນທະສັນຍາໃນການເຊື່ອຟັງພະເຍຊູຄຣິດຕະຫລອດຊີວິດຂອງເຂົາເຈົ້າ. ໃຫ້ເນັ້ນໜັກວ່າບັບຕິດສະມາ ໂດຍນ້ຳຈະບໍ່ຄົບຖ້ວນປາດສະຈາກການຢືນຢັນ ແລະ ຂອງປະທານແຫ່ງພະວິນຍານບໍລິສຸດ.

**ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ**

- ອ່ານຂໍ້ພະຄຳພີແຕ່ລະຂໍ້ດັ່ງຕໍ່ໄປນີ້, ແລະ ຂຽນບົດສະຫລຸບກ່ຽວກັບຄຸນສົມບັດສຳລັບການຮັບບັບຕິດສະມາ ແລະ ການຢືນຢັນທີ່ມີຢູ່ໃນພະຄຳພີ.

| | | |
|---|---|---|
| 2 ນີໄຟ 9:23; 31:4–13 | 3 ນີໄຟ 27:13–21 | D&C 20:37 |
| ໂມໄຊຢາ 18:8–10 | ໂມໂລໄນ 6:1–4 | D&C 22 |
| Alma 7:14–15 | ໂມໂລໄນ 8:25–26 | ກິດຈະການ 2:37–39 |

- ໃນການສຳພາດກ່ອນບັບຕິດສະມາ, ຜູ້ສະໝັກຈະຖືກຖາມວ່າ ເຂົາເຈົ້າເຕັມໃຈທີ່ຈະຮັບເອົາພະນາມຂອງພະຄຣິດຫລືບໍ່. ທ່ານຈະເຮັດແນວໃດເພື່ອຊ່ອຍໃຫ້ເຂົາເຈົ້າເຂົ້າໃຈຄຳຖາມນີ້? ເມື່ອທ່ານໄຕ່ຕອງຄຳຖາມນີ້, ໃຫ້ສຶກສາຂໍ້ພະຄຳພີດັ່ງຕໍ່ໄປນີ້:

| | | |
|---|---|---|
| ໂມໄຊຢາ 4–5 | Mosiah 26:18, 21–27 | 3 ນີໄຟ 27:1–10 |
| ໂມໄຊຢາ 18:1–11 | | |

ທ່ານຄວນຊອກຫາຂໍ້ພະຄຳພີອື່ນໆທີ່ຊ່ອຍເຫລືອທ່ານໃຫ້ເຂົ້າໃຈຫລັກທຳນີ້ນຳອີກ.

## ວິທີດຳເນີນການສຳພາດ

ຄົນທີ່ດຳເນີນການສຳພາດຄວນຈະໃຊ້ຄຳຖາມສຳລັບການສຳພາດກ່ອນບັບຕິດສະມາດ້ວຍການນຳພາຂອງພະວິນຍານເພື່ອຈະໄດ້ຮູ້ວ່າຜູ້ສະໝັກໄດ້ເຮັດຕາມຄຸນສົມບັດທີ່ບັນລະຍາຍໄວ້ໃນ Doctrine and Covenants 20:37 ຫລືບໍ່. ຜູ້ສຳພາດກໍຄວນດັດແປງຄຳຖາມໃຫ້ເໝາະສົມກັບອາຍຸ ແລະ ຄວາມເຂົ້າໃຈຂອງຜູ້ສະໝັກນຳອີກ.

ຖ້າວ່າຜູ້ສະໝັກບໍ່ມີຄຸນສົມບັດຕາມຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ, ແລ້ວຄວນໂຈະເວລາເຮັດພິທີບັບຕິດສະມາ ແລະ ການຢືນຢັນໄວ້ກ່ອນ. ຜູ້ສົນໃຈຄວນໄດ້ຮັບການສອນເພີ່ມເຕີມໂດຍຜູ້ສອນສາດສະໜາເຕັມເວລາ ແລະ ຮັບການຜູກມິດຈາກສະມາຊິກຂອງຫວອດຕໍ່ໄປ.

ຜູ້ນຳທ້ອງຖິ່ນ ຫລື ຜູ້ນຳເຂດ ທີ່ດຳເນີນການສຳພາດຄວນ:

- ມີການສຳພາດໃນບ່ອນສະບາຍໃຈ, ເປັນການສ່ວນຕົວ, ແລະ ທີ່ຊ່ອຍໃຫ້ເກີດຄວາມຮູ້ສຶກ ເຖິງພະວິນຍານຂອງພະຜູ້ເປັນເຈົ້າ. ຄູ່ຜູ້ດຳເນີນການສຳພາດຄວນຈະຢູ່ໃກ້ໆ.
- ເປີດການສຳພາດດ້ວຍການອະທິຖານ.
- ຊ່ອຍໃຫ້ຜູ້ສະໝັກຮູ້ສຶກສະບາຍໃຈ.
- ເຮັດໃຫ້ການສຳພາດເປັນປະສົບການທີ່ເຊີດຊູທາງວິນຍານ.
- ໃຫ້ແນ່ໃຈວ່າ ຜູ້ສະໝັກເຂົ້າໃຈຈຸດປະສົງຂອງການສຳພາດ.
- ຖາມຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ. ໃຊ້ຄຳຖາມຕິດຕາມຜົນຕໍ່ໄປເພື່ອຈະໄດ້ເຂົ້າໃຈ ເຖິງຄວາມເຂັ້ມແຂງຂອງປະຈັກພະຍານຂອງຄົນນັ້ນ ແລະ ຄວາມຈິງໃຈຂອງການກັບໃຈຂອງເຂົາເຈົ້າ.
- ຕອບຄຳຖາມຂອງຜູ້ສະໝັກ.
- ເຊື້ອເຊີນຄົນນັ້ນໃຫ້ສະແດງປະຈັກພະຍານ ແລະ ສະແດງຄວາມຮູ້ສຶກຂອງເຂົາເຈົ້າ.

ໝາຍເຫດ

ໝາຍເຫດ

- ຖ້າຄົນນັ້ນມີບັນຫາກ່ຽວກັບປະຈັກພະຍານ ຫລື ການມີຄ່າຄວນ, ໃຫ້ອະທິບາຍວ່າ ມັນຈະດີກວ່າ ທີ່ຈະໂຈະເວລາຂອງການຮັບບັບຕິດສະມາໄວ້ກ່ອນ ຈົນກວ່າເຂົາເຈົ້າຕຽມພ້ອມຫລາຍກວ່ານັ້ນ.

## ຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ

1. ທ່ານເຊື່ອບໍ່ວ່າ ພະເຈົ້າເປັນພະບິດາຜູ້ສະຖິດນິລັນດອນຂອງເຮົາ? ທ່ານເຊື່ອບໍ່ວ່າ ພະເຢຊູຄຣິດເປັນພະບຸດຂອງພະເຈົ້າ, ເປັນພະຜູ້ຊ່ອຍໃຫ້ລອດ ແລະ ເປັນພະຜູ້ໄຖ່ຂອງໂລກ?
2. ທ່ານເຊື່ອບໍ່ວ່າ ສາດສະໜາຈັກ ແລະ ພະກິດຕິຄຸນຂອງພະເຢຊູຄຣິດ ໄດ້ຖືກຟື້ນຟູຄືນມາໃໝ່ ຜ່ານສາດສະດາໂຢເຊັບ ສະມິດ? ທ່ານເຊື່ອບໍ່ວ່າ [ປະທານຂອງສາດສະໜາຈັກໃນປະຈຸບັນ] ເປັນສາດສະດາຂອງພະເຈົ້າ? ນີ້ໝາຍຄວາມວ່າແນວໃດສຳລັບທ່ານ?
3. ການກັບໃຈໝາຍຄວາມວ່າແນວໃດຕໍ່ທ່ານ? ທ່ານຮູ້ສຶກວ່າ ທ່ານໄດ້ກັບໃຈຈາກການລ່ວງລະເມີດທີ່ຜ່ານມາຂອງທ່ານແລ້ວບໍ?
4. ທ່ານເຄີຍເຮັດອາຊະຍາກຳທີ່ຮ້າຍແຮງມາກ່ອນບໍ? ຖ້າເຄີຍເຮັດ, ທ່ານຢູ່ໃນຂັ້ນອະນຸໂລມ ຫລື ຖືກປ່ອຍອອກຈາກຄຸກກ່ອນກຳນົດບໍ? ທ່ານເຄີຍມີສ່ວນຮ່ວມກັບການເອົາລູກອອກບໍ? ທ່ານເຄີຍສົມສູ່ກັບຄົນເພດດຽວກັນບໍ?
5. ທ່ານໄດ້ຮັບການສອນວ່າ ການເປັນສະມາຊິກໃນສາດສະໜາຈັກຂອງພະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍແມ່ນຮ່ວມດ້ວຍການດຳລົງຊີວິດຕາມມາດຕະຖານຂອງພະກິດຕິຄຸນ. ທ່ານເຂົ້າໃຈຫຍັງແດ່ກ່ຽວກັບການເຮັດຕາມມາດຕະຖານເຫລົ່ານັ້ນ? ທ່ານເຕັມໃຈທີ່ຈະເຊື່ອຟັງມາດຕະຖານເຫລົ່ານັ້ນບໍ?
   - ກ. ກົດພົມມະຈັນ, ເຊິ່ງຫ້າມບໍ່ໃຫ້ຮ່ວມເພດກັບຄົນອື່ນນອກການແຕ່ງງານທີ່ຖືກຕ້ອງຕາມກົດໝາຍລະຫວ່າງຊາຍ ແລະ ຍິງ.
   - ຂ. ກົດເງິນສ່ວນສິບ.
   - ຄ. ພະວາຈາແຫ່ງປັນຍາ.
   - ງ. ວັນຊະບາໂຕ, ຮ່ວມດ້ວຍການຮັບສິນລະລຶກທຸກອາທິດ ແລະ ຮັບໃຊ້ສະມາຊິກດ້ວຍກັນ.
6. ເມື່ອທ່ານຮັບບັບຕິດສະມາ, ທ່ານໄດ້ເຮັດພັນທະສັນຍານຳພະເຈົ້າວ່າ ທ່ານເຕັມໃຈທີ່ຈະຮັບເອົາພະນາມຂອງພະຄຣິດ ແລະ ຮັກສາພະບັນຍັດຂອງພະອົງຕະຫລອດຊີວິດຂອງທ່ານ. ທ່ານພ້ອມແລ້ວທີ່ຈະເຮັດພັນທະສັນຍານີ້ ແລະ ພະຍາຍາມທີ່ຈະຮັກສາພັນທະສັນຍານີ້ບໍ?

ໃນທ້າຍການສຳພາດທີ່ປະສົບຜົນສຳເລັດ, ໃຫ້ສະແດງຄວາມດີໃຈນຳຜູ້ສະໝັກ. ກັບຄືນໄປຫາຜູ້ສອນສາດສະໜາຄົນອື່ນໆ, ແລະ ອະທິບາຍສິ່ງທີ່ຈະເກີດຂຶ້ນໃນພິທີຮັບບັບຕິດສະມາ.

ອະທິບາຍວ່າ ການຢືນຢັນຈະຈັດຂຶ້ນພາຍໃຕ້ການຊີ້ນຳຂອງອະທິການໃນກອງປະຊຸມສິນລະລຶກຂອງຫວອດທີ່ເຂົາເຈົ້າອາໄສຢູ່.

ເມື່ອມີຄວາມຈຳເປັນທີ່ຈະຕ້ອງໂຈະພິທີບັບຕິດສະມາໄວ້ກ່ອນ, ຜູ້ນຳທ້ອງຖິ່ນ ຫລື ຜູ້ນຳເຂດ ແລະ ຜູ້ສອນສາດສະໜາຄົນອື່ນໆ ຄວນຈະຈັດການກັບເລື່ອງນີ້ໃນທາງທີ່ໄວຕໍ່ຄວາມຮູ້ສຶກ ແລະ ເປັນການສ່ວນຕົວ. ຮັບຮອງຕໍ່ຜູ້ສະໝັກວ່າ ເຂົາເຈົ້າສາມາດບັນລຸຜົນສຳເລັດໄດ້, ແລະ ອະທິບາຍວ່າ ການລ່ວງລະເມີດບາງຢ່າງຕ້ອງການເວລາຫລາຍກວ່ານັ້ນເພື່ອການກັບໃຈຢ່າງແທ້ຈິງ. ອະທິບາຍວ່າລັກສະນະອັນສັກສິດຂອງພິທີການ ຮຽກຮ້ອງໃຫ້ມີມາດຕະຖານຂອງການມີຄ່າຄວນທີ່ສູງ. ຮັບຮອງຕໍ່ຜູ້ສະໝັກວ່າທ່ານ ແລະ ຜູ້ສອນສາດສະໜາຄົນອື່ນໆ ຈະເຮັດທຸກສິ່ງທີ່ທ່ານສາມາດເຮັດໄດ້ ເພື່ອສະໜັບສະໜູນເຂົາເຈົ້າ. ຫລັງຈາກນັ້ນ ໃຫ້ເຮັດຕາມສັນຍາຂອງທ່ານຢ່າງຈິງຈັງ.

## ບັບຕິດສະມາ ແລະ ການຢືນຢັນ: ຄຳຖາມ ແລະ ຄຳຕອບ

### ແມ່ນໃຜດຳເນີນການສຳພາດສຳລັບບັບຕິດສະມາ?

ຕາມທຳມະດາແລ້ວ ຜູ້ນຳທ້ອງຖິ່ນຈະເປັນຜູ້ສຳພາດຜູ້ສະໝັກຮັບບັບຕິດສະມາທີ່ໄດ້ສອນໂດຍຜູ້ສອນສາດສະໜາໃນທ້ອງຖິ່ນຂອງເຂົາ, ຮ່ວມດ້ວຍຜູ້ສະໝັກທີ່ໄດ້ຮັບການສິດສອນຈາກຜູ້ນຳເຂດຂອງເຂົາ. ຜູ້ນຳເຂດຈະ

ໝາຍເຫດ

ສຳພາດຜູ້ສະໝັກທີ່ໄດ້ຮັບການສິດສອນຈາກຜູ້ນຳທ້ອງຖິ່ນ. ປະທານເຜີຍແຜ່ ຫລື ອີກຄົນໜຶ່ງທີ່ເພິ່ນມອບໝາຍໃຫ້ເຮັດ ຈະຕ້ອງເປັນຜູ້ສຳພາດຄົນທີ່ພົວພັນໃນບາບທີ່ຮ້າຍແຮງ. ຜູ້ນຳທ້ອງຖິ່ນ ຫລື ຜູ້ນຳເຂດ ຈະບໍ່ສຳພາດຜູ້ສະໝັກຮັບບັບຕິດສະມາທີ່ອາໄສຢູ່ນອກທ້ອງຖິ່ນ ຫລື ນອກເຂດຂອງຕົນ ເວັ້ນແຕ່ວ່າປະທານເຜີຍແຜ່ມອບໝາຍໃຫ້ເຮັດເທົ່ານັ້ນ.

### ບັບຕິດສະມາສຳລັບຜູ້ປ່ຽນໃຈເຫລື້ອມໃສໝາຍຄວາມວ່າແນວໃດ?

ບັບຕິດສະມາສຳລັບຜູ້ປ່ຽນໃຈເຫລື້ອມໃສແມ່ນການຮັບບັບຕິດສະມາຂອງ:

- ຄົນອາຍຸເກົ້າປີ ແລະ ໃຫຍ່ກວ່ານັ້ນ ຜູ້ທີ່ບໍ່ເຄີຍໄດ້ຮັບບັບຕິດສະມາ ແລະ ຮັບການຢືນຢັນເປັນສະມາຊິກຂອງສາດສະໜາຈັກມາກ່ອນ.
- ເດັກອາຍຸແປດປີ ຜູ້ທີ່ພໍ່ແມ່ທັງສອງບໍ່ແມ່ນສະມາຊິກ ຫລື ຜູ້ທີ່ພໍ່ແມ່ຈະຮັບບັບຕິດສະມາ ແລະ ຮັບການຢືນຢັນພ້ອມກັນກັບເດັກ.

### ເຮົາຕ້ອງໄດ້ຮັບການອະນຸຍາດເພື່ອບັບຕິດສະມາແກ່ຄົນທີ່ບໍ່ເຕັມກະສຽນບໍ?

ກ່ອນທ່ານຈະສາມາດສອນ ແລະ ໃຫ້ບັບຕິດສະມາແກ່ຜູ້ສົນໃຈຜູ້ທີ່ຍັງບໍ່ເຖິງກະສຽນເປັນຜູ້ໃຫຍ່, ທ່ານຕ້ອງໄດ້ຮັບການອະນຸຍາດຈາກພໍ່ແມ່ ຫລື ຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍເສຍກ່ອນ, ດີແທ້ແມ່ນໃຫ້ເປັນລາຍລັກອັກສອນ. ນອກຈາກນີ້ແລ້ວ, ທ່ານຄວນມີເຫດຜົນທີ່ດີເພື່ອເຊື່ອວ່າເດັກເຂົ້າໃຈພັນທະສັນຍາຂອງການຮັບບັບຕິດສະມາ ແລະ ຈະພະຍາຍາມຮັກສາມັນຜ່ານການເຊື່ອຟັງພະກິດຕິຄຸນ, ຮ່ວມດ້ວຍການໄປຮ່ວມກອງປະຊຸມຂອງສາດສະໜາຈັກຢ່າງເຄັ່ງຄັດ.

### ເຮົາຕ້ອງໄດ້ຮັບອະນຸຍາດຈາກຜົວ ຫລື ເມຍຂອງຜູ້ສົນໃຈບໍ ກ່ອນຈະໃຫ້ບັບຕິດສະມາແກ່ຜົວ ຫລື ເມຍຂອງເຂົາເຈົ້າ?

ແມ່ນແລ້ວ. ຢ່າໃຫ້ບັບຕິດສະມາແກ່ຜູ້ແຕ່ງງານປາດສະຈາກການເຫັນພ້ອມຂອງຜົວ ຫລື ເມຍຂອງເຂົາເຈົ້າ.

### ຖ້າພໍ່ໃນຄອບຄົວຍັງບໍ່ທັນຕຽມພ້ອມທີ່ຈະຮັບບັບຕິດສະມາເທື່ອ, ເຮົາຄວນໃຫ້ບັບຕິດສະມາແກ່ຄົນອື່ນໃນຄອບຄົວບໍ ຫລືວ່າຕ້ອງໄດ້ຖ້າຈົນຜູ້ເປັນພໍ່ພ້ອມແລ້ວ?

ຖ້າພໍ່ໃນຄອບຄົວຍັງບໍ່ທັນຕຽມພ້ອມທີ່ຈະຮັບບັບຕິດສະມາ ແລະ ຮັບການຢືນຢັນເທື່ອ ແຕ່ສະມາຊິກຄົນອື່ນໆໃນຄອບຄົວຕຽມພ້ອມແລ້ວ, ທ່ານຄວນບອກຜູ້ເປັນພໍ່ວ່າ ທ່ານບໍ່ຢາກໃຫ້ບັບຕິດສະມາແກ່ຄອບຄົວປາດສະຈາກລາວເພາະສາດສະໜາຈັກນັບຖືຫົວໜ້າຄອບຄົວ ແລະ ເພາະວ່າສະມາຊິກໃນຄອບຄົວຈະກ້າວໜ້າໃນພະກິດຕິຄຸນດີທີ່ສຸດ ຖ້າທຸກຄົນພ້ອມພຽງຮຽງໜ້າກັນ. ຖ້າພໍ່ຍັງປະຕິເສດຢູ່, ທ່ານສາມາດໃຫ້ບັບຕິດສະມາ ແລະ ຢືນຢັນສະມາຊິກຄົນອື່ນໆໃນຄອບຄົວໄດ້ ດ້ວຍການເຫັນພ້ອມຂອງຜູ້ເປັນພໍ່.

### ມັນເປັນແນວຄິດທີ່ດີບໍ ທີ່ຈະແຕ່ງຕັ້ງຜູ້ເປັນພໍ່ໃຫ້ມີຖານະປະໂລຫິດແຫ່ງອາໂລນໃນທັນທີ ຫລັງຈາກລາວຮັບບັບຕິດສະມາ ເພື່ອວ່າລາວຈະສາມາດໃຫ້ບັບຕິດສະມາແກ່ສະມາຊິກຄົນອື່ນໆໃນຄອບຄົວ?

ບໍ່. ຜູ້ເປັນພໍ່ຕ້ອງໄດ້ຮັບການຢືນຢັນໃນກອງປະຊຸມສິນລະລຶກກ່ອນ ແລະ, ຫລັງຈາກໄດ້ຮັບການສຳພາດນຳອະທິການແລ້ວ, ຈຶ່ງໄດ້ຖືກສະໜັບສະໜູນໃຫ້ໄດ້ຮັບຖານະປະໂລຫິດແຫ່ງອາໂລນ. ບໍ່ຄວນເລື່ອນເວລາເຮັດພິທີຮັບບັບຕິດສະມາຂອງສະມາຊິກໃນຄອບຄົວ ເພື່ອວ່າຜູ້ເປັນພໍ່ຈະສາມາດປະກອບພິທີຮັບບັບຕິດສະມາດ້ວຍຕົວຂອງລາວເອງ.

### ເຮົາຄວນສອນ ແລະ ໃຫ້ບັບຕິດສະມາແກ່ຄົນທີ່ໄດ້ຖືກໄລ່ອອກຈາກສາດສະໜາຈັກບໍ?

ພິທີຮັບບັບຕິດສະມາຂອງຄົນທີ່ຖືກໄລ່ອອກຈາກສາດສະໜາຈັກບໍ່ແມ່ນພິທີຮັບບັບຕິດສະມາໃຫ້ຜູ້ປ່ຽນໃຈເຫລື້ອມໃສ, ແລະ ຜູ້ສອນສາດສະໜາຈະບໍ່ສຳພາດຄົນເຫລົ່ານີ້ເພື່ອຮັບບັບຕິດສະມາ. ທ່ານອາດຈະສອນຄົນເຫລົ່ານີ້ ພາຍໃຕ້ການຄວບຄຸມທີ່ໃກ້ຊິດຂອງປະທານເຜີຍແຜ່ ແລະ ອະທິການເທົ່ານັ້ນ.

### ເຮັດແນວໃດ ຖ້າຄົນ ຄົນໜຶ່ງໄດ້ຕັ້ງວັນທີທີ່ຈະຮັບບັບຕິດສະມາໄວ້ແລ້ວ ແຕ່ບໍ່ຮັກສາຄຳໝັ້ນສັນຍາທັງໝົດ?

ຖ້າທ່ານຮູ້ສຶກວ່າຄົນທີ່ທ່ານສອນຕ້ອງການເວລາຕື່ມອີກເພື່ອຕຽມພ້ອມ, ບໍ່ໃຫ້ຈັດເວລາໄວ້ສຳລັບການສຳພາດກ່ອນບັບຕິດສະມາ ຈົນກວ່າຜູ້ສົນໃຈໄດ້ຮັກສາຄຳໝັ້ນສັນຍາທັງໝົດ ແລະ ເຮັດຕາມມາດຕະຖານທັງຫລາຍ.

ໝາຍເຫດ

**ເຮົາຈະເຮັດແນວໃດເມື່ອຜູ້ຄົນຢາກຮັບບັບຕິດສະມາ ແຕ່ເຂົາເຈົ້າຢູ່ນຳກັນແບບບໍ່ໄດ້ແຕ່ງງານ?**

ຜູ້ສະໝັກຮັບບັບຕິດສະມາທີ່ຢູ່ນຳກັນກັບເພດກົງກັນຂ້າມແບບບໍ່ໄດ້ແຕ່ງງານ ຈຳເປັນຕ້ອງແຕ່ງງານກັນເສຍກ່ອນ ຫລື ເຊົາຢູ່ນຳກັນ ກ່ອນເຂົາເຈົ້າຈະສາມາດຮັບບັບຕິດສະມາໄດ້.

**ຄຳຖາມຂໍ້ທີ 4 ທີ່ມີຢູ່ໃນການສຳພາດກ່ອນບັບຕິດສະມາຖາມຖ້າວ່າຄົນ ຄົນໜຶ່ງໄດ້ເຮັດບາບທີ່ຮ້າຍແຮງ, ດັ່ງເຊັ່ນ ການເອົາລູກອອກ, ຮ່ວມເພດກັບຄົນເພດດຽວກັນ, ຫລື ເຄີຍເຮັດອາຊະຍາກຳທີ່ຮ້າຍແຮງຫລືບໍ່. ເຮົາຄວນເຮັດແນວໃດຖ້າຄົນນັ້ນສາລະພາບບາບແບບນັ້ນ?**

1. *ຄຳແນະນຳສຳລັບການສອນຜູ້ສອນສາດສະໜາ.* ບາງຄັ້ງຜູ້ສົນໃຈອາດຈະບອກຂໍ້ມູນກ່ຽວກັບບາບທີ່ໄດ້ກ່າວມາເມື່ອທ່ານສອນກ່ຽວກັບພະບັນຍັດ ແລະ ເຊື້ອເຊີນໃຫ້ເຂົາເຈົ້າເຮັດຄຳໝັ້ນສັນຍາ. ແຕ່ວ່າ, ຖ້າເຂົາເຈົ້າບໍ່ເວົ້າຫຍັງ ແຕ່ທ່ານຄິດວ່າເຂົາເຈົ້າມີບັນຫາ, ໃຫ້ຕຽມເຂົາເຈົ້າສຳລັບການສຳພາດກ່ອນບັບຕິດສະມາ ໂດຍການຖາມເຂົາເຈົ້າວ່າ ເຂົາເຈົ້າເຄີຍເຮັດບາບແບບນີ້ຫລືບໍ່. ຖ້າທ່ານຮູ້ກ່ຽວກັບບາບທີ່ຮ້າຍແຮງ, ຢ່າຖາມກ່ຽວກັບລາຍລະອຽດຂອງບາບນັ້ນ. ຢ່າຕັ້ງວັນທີໄວ້ສຳລັບການຮັບບັບຕິດສະມາ ຫລື ສັນຍາວ່າ ເຂົາເຈົ້າຈະໄດ້ຮັບອະນຸຍາດໃຫ້ຮັບບັບຕິດສະມາ ແລະ ຮັບການຢືນຢັນ. ສະແດງຄວາມຮັກຂອງທ່ານ ແລະ ທົບທວນຫລັກທຳຂອງການກັບໃຈ. ອະທິບາຍດ້ວຍຄວາມອ່ອນໂຍນວ່າ ບາບເຫລົ່ານີ້ຮ້າຍແຮງ ແລະ ວ່າຄົນໜຶ່ງອີກທີ່ມີປັນຍາ ແລະ ມີປະສົບການຫລາຍກວ່າທ່ານ (ປະທານເຜີຍແຜ່ຂອງທ່ານ ຫລື ຜູ້ທີ່ເພິ່ນມອບໝາຍ) ຈະເວົ້າລົມນຳເຂົາເຈົ້າ ແລະ ຊ່ອຍເຫລືອເຂົາເຈົ້າໃນເລື່ອງເຫລົ່ານີ້. ຫລັງຈາກນັ້ນ ໃຫ້ສົ່ງໃບຄຳຮ້ອງຂໍການສຳພາດກ່ອນບັບຕິດສະມາໄປຫາປະທານເຜີຍແຜ່ໂດຍກົງ.

2. *ຄຳແນະນຳສຳລັບຜູ້ດຳເນີນການສຳພາດສຳລັບການບັບຕິດສະມາ.* ຖ້າຜູ້ສອນສາດສະໜາໄດ້ສອນຜູ້ສະໝັກຢ່າງເໝາະສົມກ່ອນການສຳພາດກ່ອນບັບຕິດສະມາ, ຖ້າມີບັນຫາເຫລົ່ານີ້, ຄວນສົ່ງມັນໄປຫາປະທານເຜີຍແຜ່. ຖ້າບັນຫາເຫລົ່ານີ້ເກີດຂຶ້ນ, ໃຫ້ສະແດງຄວາມຮັກຂອງທ່ານ ແລະ ທົບທວນພະບັນຍັດທັງຫລາຍ ແລະ ຫລັກທຳຂອງການກັບໃຈ. ອະທິບາຍດ້ວຍຄວາມອ່ອນໂຍນວ່າ ບາບເຫລົ່ານີ້ຮ້າຍແຮງ ແລະ ວ່າຄົນໜຶ່ງອີກທີ່ມີປັນຍາ ແລະ ມີປະສົບການຫລາຍກວ່າທ່ານ (ປະທານເຜີຍແຜ່ຂອງທ່ານ ຫລື ຜູ້ທີ່ເພິ່ນມອບໝາຍ) ຈະເວົ້າລົມນຳເຂົາເຈົ້າ ແລະ ຊ່ອຍເຫລືອເຂົາເຈົ້າໃນເລື່ອງເຫລົ່ານີ້. ຫລັງຈາກນັ້ນ ໃຫ້ສົ່ງໃບຄຳຮ້ອງຂໍການສຳພາດກ່ອນບັບຕິດສະມາໄປຫາປະທານເຜີຍແຜ່ໂດຍກົງ.

**ກິດຈະກຳ: ການສຶກສາສ່ວນຕົວ**

ຄິດວ່າທ່ານຈະຮູ້ສຶກແນວໃດຖ້າທ່ານຖືກສຳພາດ. ພິຈາລະນາຄຳຖາມດັ່ງຕໍ່ໄປນີ້:

- ພາກສ່ວນໃດຂອງຂອງການສຳພາດເບິ່ງຄືວ່າແປກປະຫລາດຕໍ່ທ່ານ? ຜູ້ດຳເນີນການສຳພາດຄວນ ເຮັດ ຫລື ເວົ້າແນວໃດເພື່ອໃຫ້ທ່ານສະບາຍໃຈ?
- ທ່ານຢາກໃຫ້ຜູ້ດຳເນີນການສຳພາດປະຕິບັດແນວໃດຕໍ່ທ່ານ?
- ທ່ານຢາກໃຫ້ຜູ້ດຳເນີນການສຳພາດຕອບແນວໃດ ຖ້າທ່ານສະແດງຄວາມສົງໄສ ຫລື ເຂົ້າໃຈຜິດ ຫລື ຖ້າທ່ານສາລະພາບບາບທີ່ຮ້າຍແຮງ?

ຂຽນຄຳຕອບຂອງທ່ານຕໍ່ຄຳຖາມເຫລົ່ານີ້ໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.

## ຂຽນບັນທຶກສຳລັບບັບຕິດສະມາໃຫ້ແລ້ວ

ຜູ້ສອນສາດສະໜາທີ່ດຳເນີນການສຳພາດຄວນຂຽນໃບບັບຕິດສະມາ ປະຈຸບັນໃຫ້ແລ້ວ. ເຂົາຄວນເຮັດຕາມຄຳແນະນຳທີ່ມີຢູ່ໃນໜັງສືນັ້ນ ແລະ ໃຫ້ແນ່ໃຈວ່າ ເຂົາຂຽນແລ້ວທັງໝົດ ແລະ ຖືກຕ້ອງ. ເຂົາຄວນອະທິບາຍວ່າ ບັນທຶກຂອງສະມາຊິກ

ໄດ້ສ້າງຂຶ້ນຈາກໃບບັນທຶກການຮັບບັບຕິດສະມາ ແລະ ຈະມີຂໍ້ມູນທີ່ສຳຄັນກ່ຽວກັບສະມາຊິກໃໝ່ ແລະ ພິທີການຕ່າງໆທີ່ເຂົາເຈົ້າໄດ້ຮັບ. ເມື່ອໃດກໍຕາມທີ່ສະມາຊິກຍ້າຍບ້ານ, ບັນທຶກຂອງສະມາຊິກຈະຖືກສົ່ງໄປຫາຫວອດໃໝ່ ເພື່ອວ່າອະທິການໃໝ່ຂອງເຂົາເຈົ້າຈະສາມາດຜູກມິດ ແລະ ໃຫ້ຄວາມຊ່ອຍເຫລືອ. ຜູ້ສອນສາດສະໜາຄວນຂໍໃຫ້ຜູ້ສະໝັກກວດເບິ່ງຂໍ້ມູນໃນໜັງສືນັ້ນ ເພື່ອຄວາມຖືກຕ້ອງລະຫວ່າງການສຳພາດ. ຜູ້ສອນສາດສະໜາທີ່ໃຫ້ການສຳພາດຄວນເອົາໃບບັນທຶກການຮັບບັບຕິດສະມາ ມາບ່ອນຮັບບັບຕິດສະມານຳ ແລະ ມອບມັນໃຫ້ຜູ້ທີ່ຄວບຄຸມພິທີ.

ອະທິການຈະເບິ່ງວ່າ ໃບບັນທຶກການຢືນຢັນ/ໃບຢັ້ງຢືນການຮັບບັບຕິດສະມາ ແລະ ການຢືນຢັນ ຖືກຂຽນຮຽບຮ້ອຍສຳລັບສະມາຊິກໃໝ່ແຕ່ລະຄົນ ຕາມຄຳແນະນຳຢູ່ໃນຟອມ.

**ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ**

ສຶກສາ Mosiah 6:1–3 ແລະ ໂມໂລໄນ 6:1–4. ຂໍ້ພະຄຳພີເຫລົ່ານີ້ກ່ຽວຂ້ອງກັບໜ້າທີ່ຮັບຜິດຊອບຂອງທ່ານເພື່ອຮັກສາບັນທຶກການຮັບບັບຕິດສະມາ ແລະ ການຢືນຢັນໃຫ້ຖືກຕ້ອງແນວໃດ?

## ພິທີຮັບບັບຕິດສະມາ

ພະວິນຍານໄດ້ຖືກສະແດງອອກຢ່າງເຂັ້ມແຂງເມື່ອພິທີການອັນສັກສິດຂອງພິທີບັບຕິດສະມາ ແລະ ການຢືນຢັນຖືກປະກອບ. ພິທີຮັບບັບຕິດສະມາ ແລະ ຫລັງຈາກນັ້ນການຢືນຢັນຄວນຈະເປັນຕອນທີ່ສຳຄັນທາງວິນຍານສຳລັບຜູ້ປ່ຽນໃຈເຫລື້ອມໃສໃໝ່. ທ່ານ ແລະ ຜູ້ນຳເຜີຍແຜ່ປະຈຳຫວອດຄວນຈະເຮັດທຸກສິ່ງທຸກຢ່າງທີ່ທ່ານສາມາດເຮັດໄດ້ ເພື່ອໃຫ້ແນ່ໃຈວ່າພິທີຮັບບັບຕິດສະມາເປັນລະບຽບ, ດົນໃຈ ແລະ ໜ້າຈົດຈຳຕະຫລອດໄປ. ພິທີເຫລົ່ານີ້ຄວນເພີ່ມຄວາມເຂັ້ມແຂງໃຫ້ແກ່ຜູ້ປ່ຽນໃຈເຫລື້ອມໃສໃໝ່ ໃນການເຮັດຄຳໝັ້ນສັນຍາຂອງເຂົາເຈົ້າ ເພື່ອຈະເປັນສະມາຊິກທີ່ເຂັ້ມແຂງຕໍ່ໄປ.



ໃຫ້ເຊື້ອເຊີນຝ່າຍອະທິການ, ຜູ້ນຳກຸ່ມ ແລະ ຜູ້ນຳອົງການຊ່ອຍເຫລືອ, ແລະ ຄູສອນປະຈຳບ້ານ ແລະ ຄູຢ້ຽມສອນ (ຖ້າວ່າໄດ້ແຕ່ງຕັ້ງແລ້ວ) ໃຫ້ໄປຮ່ວມພິທີຮັບບັບຕິດສະມາ. ໝູ່ເພື່ອນ ແລະ ພີ່ນ້ອງທັງຫລາຍຂອງຜູ້ປ່ຽນໃຈເຫລື້ອມໃສ ແລະ ຜູ້ສົນໃຈໃນປະຈຸບັນທັງຫລາຍຂອງທ່ານຄວນຈະຖືກເຊື້ອເຊີນໃຫ້ໄປຮ່ວມພິທີຮັບບັບຕິດສະມາ ແລະ ການປະຊຸມສິນລະລຶກທີ່ຈະເປັນບ່ອນໃຫ້ເຮັດການຢືນຢັນຄືກັນ. ປະສົບການເຫລົ່ານີ້ຈະຊ່ອຍໃຫ້ເຂົາເຈົ້າຮູ້ສຶກເຖິງພະວິນຍານ ແລະ ຕຽມເຂົາເຈົ້າໃຫ້ຍອມຮັບການເຊື້ອເຊີນທີ່ຈະຮຽນຮູ້ກ່ຽວກັບພະກິດຕິຄຸນຫລາຍຂຶ້ນ. ສົນທະນານຳຜູ້ສະໝັກຮັບບັບຕິດສະມາ ແລະ ຜູ້ນຳເຜີຍແຜ່ປະຈຳຫວອດ ເພື່ອຈະໄດ້ເຊື້ອເຊີນໝູ່ເພື່ອນ ແລະ ພີ່ນ້ອງທັງຫລາຍຂອງຜູ້ສະໝັກໃຫ້ໄປຮ່ວມ. ຫລັງຈາກພິທີຮັບບັບຕິດສະມາແລ້ວ ໃຫ້ຕິດຕາມຜົນຕໍ່ໄປເພື່ອສົນທະນາກ່ຽວກັບປະສົບການຂອງເຂົາເຈົ້າ ແລະ ເຊື້ອເຊີນເຂົາເຈົ້າໃຫ້ຮຽນຮູ້ວ່າເປັນຫຍັງເພື່ອນຂອງເຂົາເຈົ້າຈຶ່ງໄດ້ເລືອກຮັບບັບຕິດສະມາ.

ຜູ້ສອນສາດສະໜາທີ່ໄດ້ສອນຜູ້ສະໝັກຮັບບັບຕິດສະມາຈະປະສານງານຮ່ວມກັບຜູ້ນຳເຜີຍແຜ່ປະຈຳຫວອດເພື່ອຈັດພິທີ. ອະທິບາຍແຜນຕໍ່ຜູ້ສະໝັກຮັບບັບຕິດສະມາ ແລະ ເຫດຜົນກ່ຽວກັບແຜນນັ້ນ. ສົນທະນາການນຸ່ງເຄື່ອງທີ່ເໝາະສົມ, ຮ່ວມດ້ວຍວ່າຜູ້ສະໝັກຈະໄດ້ຮັບຊຸດສີຂາວໃຫ້ນຸ່ງສຳລັບການຮັບບັບຕິດສະມາ. ຕົກລົງກັນກ່ຽວກັບສະຖານທີ່ ແລະ ເວລາທີ່ຈະເຮັດພິທີຮັບບັບຕິດສະມາ. ຕາມທຳມະດາແລ້ວ ຜູ້ໜຶ່ງໃນຝ່າຍອະທິການ ຫລື ຜູ້ນຳການເຜີຍແຜ່ປະຈຳຫວອດ ຈະດຳເນີນພິທີ. ຕໍ່ໄປນີ້ຄືລາຍການທີ່ສຳຄັນ ທີ່ຕ້ອງຈັດ ແລະ ວາງແຜນ.

ພິທີຮັບບັບຕິດສະມາອາດຮ່ວມດ້ວຍ:

1. ດົນຕີກ່ອນເລີ່ມຕົ້ນ.
2. ການກ່າວຍິນດີຕ້ອນຮັບສັ້ນໆໂດຍຜູ້ນຳຖານະປະໂລຫິດທີ່ດຳເນີນພິທີ (ຜູ້ໜຶ່ງໃນຝ່າຍອະທິການຄວນເປັນຜູ້ຄວບຄຸມ).
3. ເພງສວດເປີດ ແລະ ອະທິຖານເປີດ.

ໝາຍເຫດ

ໝາຍເຫດ

4. ໜຶ່ງ ຫລື ສອງຄົນກ່າວຄຳປາໄສສັ້ນໆກ່ຽວກັບພະກິດຕິຄຸນ, ດັ່ງເຊັ່ນ ການຮັບບັບຕິສະມາ ແລະ ຂອງປະທານແຫ່ງພະວິນຍານບໍລິສຸດ.
5. ດົນຕີພິເສດ.
6. ການປະກອບພິທີຮັບບັບຕິສະມາ.
7. ເວລາເພື່ອຄວາມຄາລະວະ ຂະນະທີ່ຜູ້ມີສ່ວນໃນການຮັບບັບຕິສະມາປ່ຽນເຄື່ອງ. ນີ້ຄວນຈະຮ່ວມດ້ວຍການຟັງເພງ, ຮ້ອງເພງສວດ ແລະ ເພງປະຖົມໄວທີ່ຫລາຍຄົນຮູ້ຈັກ, ການສາຍໜັງຂອງສາດສະໜາຈັກ, ຫລື ການສະແດງປະຈັກພະຍານ.
8. ຖ້າປາດຖະໜາ, ໃຫ້ໂອກາດສຳລັບຜູ້ປ່ຽນໃຈເຫລື້ອມໃສໃໝ່ສະແດງປະຈັກພະຍານຂອງເຂົາເຈົ້າ.
9. ເພງສວດປິດ ແລະ ອະທິຖານປິດ.
10. ດົນຕີຫລັງຈາກຈົບພິທີ.

## ການຢືນຢັນ



ບຸກຄົນຈະໄດ້ຮັບການຢືນຢັນຫລັງຈາກເຂົາເຈົ້າໄດ້ຮັບບັບຕິສະມາ (see D&C 20:41). ຜູ້ປ່ຽນໃຈເຫລື້ອມໃສໃໝ່ ຈະຖືກນັບວ່າເປັນສະມາຊິກຂອງສາດສະໜາຈັກຫລັງຈາກພິທີຮັບບັບຕິສະມາ ແລະ ຫລັງຈາກໄດ້ຮັບການຢືນຢັນ (ເບິ່ງ ໂຢຮັນ 3:5; D&C 33:11). ຜູ້ປ່ຽນໃຈເຫລື້ອມໃສໃໝ່ຈະໄດ້ຮັບການຢືນຢັນໃນກອງປະຊຸມສິນລະລຶກ ໃນຫວອດທີ່ເຂົາເຈົ້າອາໄສຢູ່. ບໍ່ແມ່ນຢູ່ໃນພິທີຮັບບັບຕິສະມາ. ອະທິການມີໜ້າທີ່ຮັບຜິດຊອບເພື່ອເບິ່ງວ່າ ການຢືນຢັນໄດ້ຖືກປະກອບໄວຕາມສົມຄວນຫລັງຈາກບັບຕິສະມາແລ້ວ. ອະທິການ ຫລື ທີ່ປຶກສາຄົນໜຶ່ງຂອງເພິ່ນຈະຮ່ວມໃນການຢືນຢັນ. ອະທິການອາດຈະເຊື້ອເຊີນຜູ້ສອນສາດສະໜາທີ່ເປັນແອວເດີ ຜູ້ຊ່ວຍສອນຜູ້ປ່ຽນໃຈເຫລື້ອມໃສຄົນນັ້ນເຂົ້າຮ່ວມໃນການຢືນຢັນ. ໃຫ້ປະສານງານນຳອະທິການ ແລະ ຜູ້ນຳເຜີຍແຜ່ຢ່າງໃກ້ຊິດ ເພື່ອໃຫ້ແນ່ໃຈວ່າພິທີການທີ່ຈຳເປັນນີ້ໄດ້ຖືກປະກອບ.

## ຫລັງຈາກບັບຕິສະມາ ແລະ ການຢືນຢັນ

ພາຍໃຕ້ການຊີ້ນຳຂອງອະທິການ, ຜູ້ສອນສາດສະໜາອາດຈະພົວພັນນຳສະມາຊິກໃໝ່ຕໍ່ໄປ. ສອນເຂົາເຈົ້າຕໍ່ໄປ ແລະ ທົບທວນສິ່ງທີ່ເຂົາເຈົ້າໄດ້ຮຽນມາ. ສະໜັບສະໜູນ ແລະ ຊຸກຍູ້ເຂົາເຈົ້າ, ອ່ານພະຄຳພີນຳອນນຳເຂົາເຈົ້າ, ແລະ ຊ່ວຍເຫລືອເຂົາເຈົ້າໃຫ້ແບ່ງປັນພະກິດຕິຄຸນນຳສະມາຊິກໃນຄອບຄົວ ແລະ ເພື່ອນຝູງຂອງເຂົາເຈົ້າ. ເມື່ອເໝາະສົມ, ໃຫ້ຕິດຕໍ່ຫາຜູ້ທີ່ທ່ານໄດ້ສອນ ແລະ ສະໜັບສະໜູນ ແລະ ຊຸກຍູ້ເຂົາເຈົ້າຕໍ່ໄປຕະຫລອດຊີວິດຂອງທ່ານ.

ຫລັງຈາກການຢືນຢັນ, ໃຫ້ໃຊ້ບັນທຶກການສອນຕໍ່ໄປ ເພື່ອບັນທຶກຄວາມກ້າວໜ້າໃນການສອນບົດຮຽນທີ 1–4 ອີກ ແລະ ໃນການສອນບົດຮຽນທີ 5. ໃຫ້ປະສານງານຢ່າງໃກ້ຊິດກັບຜູ້ນຳເຜີຍແຜ່ປະຈຳຫວອດ ແລະ ຝ່າຍຜູ້ນຳຫວອດ ເພື່ອຊ່ວຍເຫລືອຜູ້ປ່ຽນໃຈເຫລື້ອມໃສໃໝ່ໃຫ້ເຂັ້ມແຂງຕໍ່ໄປ ແລະ ຮັບພອນທັງໝົດຂອງການຊົດໃຊ້ຂອງພະເຢຊູຄຣິດ.

### ໃຫ້ຈື່ຈຳສິ່ງນີ້:

- ຕຽມຜູ້ສະໝັກຮັບບັບຕິສະມາຢ່າງເໝາະສົມ ເພື່ອການສຳພາດສຳລັບບັບຕິສະມາ ແລະ ການຢືນຢັນ.
- ໃຫ້ແນ່ໃຈວ່າ ຜູ້ສະໝັກໄດ້ເຮັດຕາມຄຸນສົມບັດສຳລັບການຮັບບັບຕິສະມາ ແລະ ການຢືນຢັນ.
- ຊ່ວຍໃຫ້ແນ່ໃຈວ່າ ພິທີຮັບບັບຕິສະມາເຮັດໃຫ້ເບີກບານທາງວິນຍານ.
- ໃຊ້ພິທີຮັບບັບຕິສະມາ ແລະ ການຢືນຢັນເປັນໂອກາດເພື່ອຊອກຫາຄົນ.
- ຂຽນໃບຮັບບັບຕິສະມາ ແລະ ການຢືນຢັນໃຫ້ຖືກຕ້ອງ.

# ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

ໝາຍເຫດ

## ການສຶກສາສ່ວນຕົວ

- ຂຽນການທ້າທາຍທີ່ຜູ້ສະໝັກຮັບບັບຕິດສະມາອາດມີ. ເປັນຫຍັງມັນຈຶ່ງເປັນສິ່ງສຳຄັນທີ່ຜູ້ສະໝັກຈະຮູ້ສຶກເຖິງຄວາມຮັກ ແລະ ມິດຕະພາບຈາກສະມາຊິກຂອງສາດສະໜາຈັກ?

- ສຶກສາ ໂມໂລໄນ 6 ແລະ Doctrine and Covenants 20:68–69. ທ່ານຮຽນຮູ້ຫຍັງແດ່ຈາກຂໍ້ພະຄຳພີເຫລົ່ານີ້ກ່ຽວກັບການຕຽມຄົນເພື່ອຮັບບັບຕິດສະມາ ແລະ ຮັບການຢືນຢັນ? ຂຽນສິ່ງທີ່ທ່ານຮຽນ, ແລະ ແບ່ງປັນຄວາມຄິດຂອງທ່ານນຳຄູ່ສອນສາດສະໜາຂອງທ່ານລະຫວ່າງການສຶກສາກັບຄູ່ສອນສາດສະໜາ.

## ການສຶກສາກັບຄູ່ສອນສາດສະໜາ

- ແອວເດີ ເຣັນລີ ບີ ໄອລິງ ໄດ້ອະທິບາຍວ່າ ເປັນຫຍັງມາດຕະຖານອັນສູງເປັນສິ່ງທີ່ສຳຄັນ. ໃຫ້ສົນທະນາຄຳສັ່ງສອນນີ້ນຳຄູ່ສອນສາດສະໜາຂອງທ່ານ ແລະ ປະເມີນວ່າທ່ານຮູ້ສຶກແນວໃດກ່ຽວກັບການຊ່ອຍເຫລືອຄົນຢ່າງກ້າຫານ ໃນການເຮັດຕາມມາດຕະຖານເຫລົ່ານີ້. "ພະຜູ້ເປັນເຈົ້າໄດ້ຕັ້ງມາດຕະຖານຂອງພະອົງຂຶ້ນ ເພື່ອໃຫ້ພອນແກ່ພວກເຮົາ. ຈົ່ງຄິດເຖິງພອນເຫລົ່ານັ້ນ. ພະອົງສັນຍາວ່າ ຄົນທີ່ເຮັດຕາມມາດຕະຖານເຫລົ່ານັ້ນ ຈະໄດ້ຮັບການຊ່ອຍເຫລືອຈາກພະວິນຍານບໍລິສຸດ. ພະອົງສັນຍາທີ່ຈະມອບຄວາມສະຫງົບສ່ວນຕົວໃຫ້. ພະອົງສັນຍາທີ່ຈະມອບໂອກາດທີ່ຈະຮັບພິທີການອັນສັກສິດໃນບ້ານຂອງພະອົງ. ແລະພະອົງສັນຍາວ່າ ຄົນທີ່ຈະອົດທົນຈົນເຖິງທີ່ສຸດໃນການດຳລົງຊີວິດຕາມມາດຕະຖານຂອງພະອົງຈະໄດ້ຮັບຊີວິດນິລັນດອນ. . . . ເພາະພວກເຮົາຮັກຄົນທີ່ເຮົາຮັບໃຊ້, ເຮົາທຸກໆຄົນຈຶ່ງຢາກເຮັດໃຫ້ດີຂຶ້ນໃນການຊ່ອຍລູກໆຂອງພະບິດາເທິງສະຫວັນຂອງເຮົາໃຫ້ສັດຊື່ ແລະ ບໍລິສຸດທີ່ເຂົາເຈົ້າຕ້ອງມີ ເພື່ອຈະໄດ້ຮັບພອນທັງໝົດຂອງພະຜູ້ເປັນເຈົ້າ. . . . ທ່ານເລີ່ມຕົ້ນໂດຍການສະໜັບສະໜູນມາດຕະຖານຂອງພະຜູ້ເປັນເຈົ້າຢ່າງແຈ່ມແຈ້ງ ແລະ ຢ່າງບໍ່ເສຍໃຈ. ແລະ ເມື່ອໂລກແຍກອອກຈາກ ແລະ ເຢາະເຢີ້ຍມາດຕະຖານເຫລົ່ານີ້ຫລາຍຂຶ້ນເທົ່າໃດ, ພວກເຮົາຕ້ອງສະໜັບສະໜູນຢ່າງກ້າຫານຫລາຍຂຶ້ນເທົ່ານັ້ນ" ("Standards of Worthiness," *First Worldwide Leadership Training Meeting*, Jan. 2003, 10–11).

- ແບ່ງປັນນຳຄູ່ສອນສາດສະໜາຂອງທ່ານສິ່ງທີ່ທ່ານໄດ້ຮຽນມາຈາກບົດນີ້ກ່ຽວກັບການຕຽມຄົນ ເພື່ອຮັບບັບຕິດສະມາ ແລະ ການຢືນຢັນ.

- ທົບທວນພິທີຮັບບັບຕິດສະມາທີ່ທ່ານໄປຮ່ວມເທື່ອແລ້ວນີ້. ປຽບທຽບພິທີນັ້ນນຳການແນະນຳທີ່ມີຢູ່ໃນພາກທີ່ເອີ້ນວ່າ "ພິທີຮັບບັບຕິດສະມາ." ແມ່ນຫຍັງເຮັດໄດ້ດີ? ແມ່ນຫຍັງທີ່ຄວນເຮັດໃຫ້ດີຂຶ້ນ? ສົນທະນາວິທີທີ່ທ່ານຈະໃຫ້ແນ່ໃຈວ່າ ພິທີທີ່ທ່ານວາງແຜນຈະເປັນພິທີທີ່ເຮັດໃຫ້ເບີກບານ ແລະ ມີພະວິນຍານສະຖິດຢູ່ນຳ.

- ຝຶກວິທີທີ່ທ່ານຈະຕຽມຜູ້ສົນໃຈຄົນໜຶ່ງເພື່ອການສຳພາດກ່ອນຮັບບັບຕິດສະມາ.

- ທົບທວນຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ. ພິຈາລະນາເຖິງວິທີທີ່ທ່ານອາດຈະຈັດການກັບສະພາບການຕ່າງໆ, ດັ່ງເຊັ່ນ ສິ່ງຕໍ່ໄປນີ້:
  - ຜູ້ສະໝັກບໍ່ໄດ້ບອກທ່ານວ່າ ເຂົາກຳລັງຢູ່ໃນຊ່ວງຜ່ອນໂທດ ທີ່ກ່ຽວກັບອາຊະຍາກຳທີ່ໄດ້ເຮັດມາກ່ອນ.

ໝາຍເຫດ

- ຄົນນັ້ນບໍ່ໄດ້ຮັບຄຳຕອບອັນໜັກແໜ້ນຕໍ່ການອະທິຖານວ່າ ໂຢເຊັບ ສະມິດ ເປັນສາດສະດາ.
- ຜູ້ສະໝັກໄດ້ສູບຢາສອງມື້ຜ່ານມາ.
- ຜູ້ສະໝັກບໍ່ແນ່ໃຈວ່າ ເຂົາເຈົ້າໄດ້ຮັບຄຳຕອບຕໍ່ການອະທິຖານຂອງເຂົາເຈົ້າຫລືບໍ່.
- ຄອບຄົວຮູ້ສຶກຖືກກົດດັນຈາກໝູ່ເພື່ອນຂອງເຂົາເຈົ້າ ແລະ ບໍ່ແນ່ໃຈວ່າ ເຂົາເຈົ້າຕຽມພ້ອມທີ່ຈະຮັບບັບຕິດສະມາຫລືບໍ່.

- ທົບທວນ ປຶ້ມບັນທຶກການຮັບບັບຕິດສະມາ ແລະ ໃບບັນທຶກການຢືນຢັນ ແລະ ໃບຢັ້ງຢືນການຮັບບັບຕິດສະມາ ແລະ ການຢືນຢັນ. ທ່ານຈະໃຫ້ແນ່ໃຈວ່າຂໍ້ມູນທີ່ທ່ານຂຽນໄວ້ຖືກຕ້ອງ ແລະ ຄົບຖ້ວນແນວໃດ?

## ການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດ

- ທົບທວນຄວາມສຳຄັນກ່ຽວກັບການສຳພາດກ່ອນບັບຕິດສະມາ. ສົນທະນາວິທີທີ່ຜູ້ສອນສາດສະໜາຄວນຕຽມຜູ້ສົນໃຈເພື່ອການສຳພາດ.
- ສົນທະນາກ່ຽວກັບວິທີທີ່ຈະໃຊ້ພິທີຮັບບັບຕິດສະມາ ແລະ ການຢືນຢັນໃຫ້ເປັນໂອກາດເພື່ອຊອກຫາຄົນ.

## ປະທານເຜີຍແຜ່

- ປະສານງານກັບຜູ້ນຳຖານະປະໂລຫິດໃນທ້ອງຖິ່ນເພື່ອໃຫ້ແນ່ໃຈວ່າ ເຂົາເຈົ້າໃຊ້ບັນທຶກຄວາມກ້າວໜ້າ ຢ່າງມີຜົນ.
- ບາງຄັ້ງບາງຄາວ ໃຫ້ດຳເນີນການສຳພາດເພື່ອທຳອິດສຳລັບການຮັບບັບຕິດສະມາ.
- ສອນຜູ້ນຳທ້ອງຖິ່ນ ແລະ ຜູ້ນຳເຂດກ່ຽວກັບວິທີທີ່ຈະດຳເນີນການສຳພາດກ່ອນບັບຕິດສະມາ.
- ສອນສະມາຊິກໃນຝ່າຍປະທານເຜີຍແຜ່ ແລະ ຜູ້ນຳຖານະປະໂລຫິດກ່ຽວກັບວິທີທີ່ຈະດຳເນີນການສຳພາດກ່ອນບັບຕິດສະມາສຳລັບຜູ້ສະໝັກຮັບບັບຕິດສະມາທີ່ເຄີຍເຮັດບາບຮ້າຍແຮງ.



# ເຮົາຈະເຮັດວຽກງານກັບຜູ້ນຳສະເຕກ ແລະ ຫວອດໄດ້ແນວໃດ?

ໝາຍເຫດ

### ໃຫ້ພິຈາລະນາເລື່ອງນີ້

- ຜູ້ປ່ຽນໃຈເຫລື້ອມໃສໃໝ່ ແລະ ສະມາຊິກທີ່ບໍ່ເຂັ້ມແຂງຕ້ອງການຫຍັງແດ່ເພື່ອຈະກາຍເປັນສະມາຊິກທີ່ເຂັ້ມແຂງຂອງສາດສະໜາຈັກໄດ້?
- ຄວາມຮັບຜິດຊອບຂອງຜູ້ນຳສະເຕກ ແລະ ຫວອດມີຫຍັງແດ່ ໃນວຽກງານເຜີຍແຜ່, ການຮັກສາສະມາຊິກໄວ້, ແລະ ການນຳຄົນກັບຄືນມາໂບດ?
- ເຮົາຈະຊ່ອຍຜູ້ນຳຫວອດສ້າງສັນສາດສະໜາຈັກໄດ້ແນວໃດ?
- ອັນໃດຄວນເກີດຂຶ້ນໃນການປະຊຸມສຳພັນກັບຜູ້ນຳເຜີຍແຜ່ປະຈຳຫວອດ ແຕ່ລະອາທິດ?

ທ່ານມີໂອກາດດີທີ່ສຸດ ທີ່ຈະໄດ້ເຮັດວຽກງານຮ່ວມກັບຜູ້ນຳ ແລະ ສະມາຊິກຫລາຍຄົນໃນລະຍະການເຜີຍແຜ່ສາດສະໜາຂອງທ່ານ. ພ້ອມກັນພວກທ່ານຈະສ້າງສັນ ແລະ ຊ່ອຍໃຫ້ສາດສະໜາຈັກຂອງພະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍເຂັ້ມແຂງຂຶ້ນ. ຄວາມສຳພັນທີ່ທ່ານໄດ້ສ້າງກັບຜູ້ນຳໃນສາດສະໜາຈັກ ຈະໃຫ້ພອນທ່ານໄປຕະຫລອດຊີວິດ. ນີ້ເປັນຄວາມສຳພັນທີ່ສຳຄັນ ຂະນະທີ່ທ່ານ ແລະ ສະມາຊິກຂອງສາດສະໜາຈັກສະແຫວງຫາ ເພື່ອນຳເອົາພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ ມາສູ່ລູກໆຂອງພະບິດາເທິງສະຫວັນ. ການເຂົ້າໃຈຂັ້ນພື້ນຖານເຖິງວິທີທີ່ຈະເຮັດວຽກງານພາຍໃນອົງການຂອງຫວອດ ຈະຊ່ອຍທ່ານໃຫ້ກ້າວໄປໜ້າດ້ວຍຄວາມເອົາໃຈໃສ່ ແລະ ດ້ວຍພະລັງ.

## ການຊ່ອຍສະມາຊິກໃໝ່ ແລະ ສະມາຊິກທີ່ບໍ່ເຂັ້ມແຂງ ໃຫ້ເຂັ້ມແຂງຂຶ້ນ

ເມື່ອຜູ້ປ່ຽນໃຈເຫລື້ອມໃສຮັບບັບຕິສະມາ ແລະ ການຢືນຢັນ, ເຂົາເຈົ້າໄດ້ເຮັດຄຳສັນຍາອັນສັກສິດທີ່ຈະເຊື່ອຟັງ ແລະ ຮັບໃຊ້ພະເຈົ້າ ແລະ ຄົນອື່ນໆຕະຫລອດຊີວິດຂອງເຂົາເຈົ້າ. ເຂົາເຈົ້າກາຍມາເປັນຜູ້ສະໝັກຮັບຄວາມລອດໃນອານາຈັກຊັ້ນສູງ. ເພື່ອຈະໄດ້ຮັບພອນທີ່ໄດ້ສັນຍາໄວ້, ເຂົາເຈົ້າຕ້ອງອົດທົນຈົນເຖິງທີ່ສຸດດ້ວຍສັດທາໃນພະເຢຊູຄຣິດ. ສະມາຊິກຂອງສາດສະໜາຈັກກໍສຳຄັນໃນການຊ່ອຍຜູ້ປ່ຽນໃຈເຫລື້ອມໃສໃໝ່ໃຫ້ເຂັ້ມແຂງ ແລະ ສັດຊື່ຢູ່ຕໍ່ໄປ.

ປະທານ ກໍດອນ ບີ ຮິງລີ ໄດ້ກ່າວວ່າ: "ການເຮັດວຽກງານເຜີຍແຜ່ຈະບໍ່ມີປະໂຫຍດຫຍັງເລີຍ ຖ້າຫາກເຮົາບໍ່ຮັກສາຜົນຂອງຄວາມພະຍາຍາມນັ້ນໄວ້. ຈະແຍກທັງສອງຢ່າງນີ້ອອກຈາກກັນບໍ່ໄດ້. . . . ຜູ້ປ່ຽນໃຈເຫລື້ອມໃສ ທຸກຄົນເປັນຄວາມຮັບຜິດຊອບທີ່ຍິ່ງໃຫຍ່ ແລະ ສຳຄັນ" ("Find the Lambs, Feed the Sheep," *Ensign*, May 1999, 108).

© 2003 Simon Dewey. ຫ້າມລອກແບບ.

ໝາຍເຫດ

ພາຍໃຕ້ການຊີ້ນຳຂອງອະທິການ, ສະພາຫວອດມີຄວາມຮັບຜິດຊອບຕົ້ນຕໍໃນການຊ່ອຍສະມາຊິກໃໝ່ ແລະ ສະມາຊິກທີ່ບໍ່ເຂັ້ມແຂງໃຫ້ເຂັ້ມແຂງຂຶ້ນ. ເຂົາເຈົ້າຈະເບິ່ງວ່າຜູ້ປ່ຽນໃຈເຫລື້ອມໃສໃໝ່ ແລະ ສະມາຊິກທີ່ບໍ່ເຂັ້ມແຂງມີໝູ່ເພື່ອນ, ໄດ້ບຳລຸງລ້ຽງດ້ວຍຄຳຂອງພະເຈົ້າ, ແລະ ໄດ້ຮັບການເອີ້ນ ແລະ ໜ້າທີ່ຮັບຜິດຊອບ. ເຂົາເຈົ້າອາດຈະຂໍຮ້ອງໃຫ້ຜູ້ສອນສາດສະໜາເຕັມເວລາຊ່ອຍໃນການສອນປະຈຳບ້ານ (ຫລື ຜູ້ສອນສາດສະໜາທີ່ເປັນຜູ້ຍິງ ຊ່ອຍໃນການຢ້ຽມສອນ) ແລະ ໃນການຢ້ຽມຢາມສະມາຊິກໃໝ່, ສະມາຊິກທີ່ບໍ່ເຂັ້ມແຂງ, ແລະ ຜູ້ອາດຈະເປັນແອວເດີ. ດີແທ້ແມ່ນໃຫ້ທ່ານເປັນຄູ່ກັບສະມາຊິກໃນການໄປຢ້ຽມຢາມ.

ທ່ານກໍຍັງຕ້ອງຮັບຜິດຊອບຕໍ່ຄົນເຫລົ່ານີ້ນຳອີກ. ປະທານ ຮິງລີ ໄດ້ກ່າວວ່າ: "ພວກທ່ານ ຜູ້ສອນສາດສະໜາ . . . ເປັນສ່ວນໜຶ່ງຂອງການຮັບຜິດຊອບນີ້ ທີ່ຈະຜູກມັດຜູ້ປ່ຽນໃຈເຫລື້ອມໃສຂອງທ່ານເຂົ້າກັບສາດສະໜາຈັກ. ທ່ານອາດຈະບໍ່ສາມາດໄປຢ້ຽມຢາມເຂົາຕໍ່ໄປ. ແຕ່ບາງຄັ້ງບາງຄາວ ທ່ານຄວນຂຽນຈົດໝາຍຫາເຂົາ ແລະ ໃຫ້ກຳລັງໃຈເຂົາ. . . . ເມື່ອທ່ານກັບເມືອບ້ານ ຢ່າລືມເຂົາ. ໃນທຸກໆເວລາໃຫ້ດຳລົງຊີວິດຢ່າງມີຄ່າຄວນ ຕໍ່ຄວາມໄວ້ວາງໃຈຂອງເຂົາ. ບາງຄັ້ງບາງຄາວ ໃຫ້ຂຽນຈົດໝາຍຫາເຂົາ, ບອກໃຫ້ເຂົາຮູ້ເຖິງຄວາມຮັກຂອງທ່ານ" (*Ensign*, May 1999, 109).



ເມື່ອໄປຮ່ວມກອງປະຊຸມໂບດ, ທ່ານ ແລະ ຄູ່ສອນສາດສະໜາຂອງທ່ານ ຄວນນັ່ງນຳຜູ້ສົນໃຈຂອງທ່ານ ຫລື ນັ່ງນຳສະມາຊິກທີ່ທ່ານໄດ້ຜູກມິດ ເພື່ອໃຫ້ການສະໜັບສະໜູນ ແລະ ຊ່ອຍໃຫ້ເຂົາເຈົ້າເຂັ້ມແຂງຂຶ້ນ. ທ່ານບໍ່ຄວນນັ່ງເປັນກຸ່ມນຳຜູ້ສອນສາດສະໜາຄົນອື່ນໆ.

ສ່ວນທີ່ສຳຄັນໃນວຽກງານເຜີຍແຜ່ຂອງທ່ານ ແມ່ນເພື່ອສ້າງສັນສາດສະໜາຈັກ ແລະ ຊ່ອຍໃຫ້ໜ່ວຍທີ່ທ່ານຮັບໃຊ້ເຂັ້ມແຂງຂຶ້ນ. ທ່ານເຮັດສ່ວນນີ້ດ້ວຍການຊ່ອຍຜູ້ປ່ຽນໃຈເຫລື້ອມໃສໃໝ່ໃຫ້ເຂັ້ມແຂງຕໍ່ໄປ ແລະ ດ້ວຍການຊ່ອຍເຫລືອສະມາຊິກທີ່ບໍ່ເຂັ້ມແຂງໃຫ້ກັບຄືນມາໂບດ. ໜ້າທີ່ຮັບຜິດຊອບຢ່າງໜຶ່ງຂອງທ່ານແມ່ນການຮ່ວມເຮັດວຽກງານກັບຜູ້ສອນສາດສະໜາປະຈຳຫວອດ ເພື່ອສອນບົດຮຽນສີ່ບົດທຳອິດ ແລະ ສອນບົດຮຽນທີ 5 ຄືນອີກ. ຜູ້ສອນສາດສະໜາປະຈຳຫວອດ, ຄູສອນປະຈຳບ້ານ, ແລະ ຜູ້ຢ້ຽມສອນ ສາມາດຊ່ອຍສອນຫລັກທຳເຫລົ່ານີ້ໄດ້ຄືກັນ.

ປະທານ ກໍດອນ ບີ ຮິງລີ ໄດ້ເລົ່າເລື່ອງຕໍ່ໄປນີ້ ເຖິງການທ້າທາຍທີ່ຜູ້ປ່ຽນໃຈເຫລື້ອມໃສໃໝ່ຫລາຍຄົນປະເຊີນ:

> *ມື້ກ່ອນນັ້ນຂ້າພະເຈົ້າໄດ້ຮັບຈົດໝາຍທີ່ໜ້າສົນໃຈສະບັບໜຶ່ງ. ຜູ້ຍິງທີ່ໄດ້ເຂົ້າຮ່ວມສາດສະໜາຈັກໜຶ່ງປີກ່ອນໄດ້ຂຽນຈົດໝາຍນີ້. ລາວຂຽນວ່າ:*
>
> *"ການເດີນທາງຂອງຂ້າພະເຈົ້າມາສູ່ສາດສະໜາຈັກກໍພິເສດ ແລະ ທ້າທາຍຫລາຍ. ປີທີ່ຜ່ານມາໄດ້ເປັນປີທີ່ຍາກທີ່ສຸດໃນຊີວິດຂອງຂ້າພະເຈົ້າ. ແຕ່ມັນກໍໄດ້ເປັນປີທີ່ໃຫ້ຄວາມພໍໃຈຫລາຍ. ໃນຖານະທີ່ເປັນສະມາຊິກໃໝ່, ຂ້າພະເຈົ້າຖືກທ້າທາຍຢູ່ຕໍ່ໄປທຸກໆມື້."*
>
> *ລາວເວົ້າຕໍ່ໄປວ່າ ຕອນລາວເຂົ້າຮ່ວມສາດສະໜາຈັກ ລາວຮູ້ສຶກວ່າ ລາວບໍ່ໄດ້ຮັບການສະໜັບສະໜູນຈາກຜູ້ນຳໃນຫວອດຂອງລາວ. ອະທິການຂອງລາວເບິ່ງຄືວ່າ ບໍ່ສົນໃຈກັບການເປັນສະມາຊິກໃໝ່ຂອງລາວ. ເພາະວ່າລາວຮູ້ສຶກຖືກປະຕິເສດ ລາວຈຶ່ງກັບຄືນໄປຫາປະທານເຜີຍແຜ່ຂອງລາວ, ທີ່ໄດ້ເປີດໂອກາດໃຫ້ແກ່ລາວ.*
>
> *ລາວກ່າວວ່າ "ສະມາຊິກຂອງສາດສະໜາຈັກບໍ່ຮູ້ວ່າການເປັນສະມາຊິກໃໝ່ເປັນແບບໃດ. . . . ສະນັ້ນ, ມັນເກືອບເປັນໄປບໍ່ໄດ້ທີ່ເຂົາເຈົ້າຈະຮູ້ວິທີທີ່ຈະສະໜັບສະໜູນເຮົາ."*
>
> *ຂ້າພະເຈົ້າຂໍທ້າທາຍພວກທ່ານ, ອ້າຍເອື້ອຍນ້ອງຂອງຂ້າພະເຈົ້າ, ຖ້າຫາກທ່ານບໍ່ຮູ້ວ່າມັນເປັນແບບໃດ, ໃຫ້ພວກທ່ານພະຍາຍາມນຶກຄິດວ່າ ມັນເປັນແບບໃດ. ມັນອາດເປັນການໂດດດ່ຽວແທ້ໆ. ມັນອາດເປັນການຜິດຫວັງກໍໄດ້. ມັນອາດເປັນຕາຢ້ານກໍໄດ້. ພວກເຮົາໃນສາດສະໜາຈັກນີ້ແມ່ນແຕກຕ່າງຫລາຍຈາກຄົນໃນໂລກໄກກວ່າເຮົາຄິດວ່າເຮົາເປັນ. ຍິງຜູ້ນີ້ເວົ້າຕໍ່ໄປວ່າ: "ເມື່ອເຮົາຜູ້ສົນໃຈກາຍເປັນສະມາຊິກຂອງສາດສະໜາຈັກ, ເຮົາຕົກໃຈທີ່ໄດ້ເຫັນວ່າ ເຮົາໄດ້ເຂົ້າມາໃນໂລກທີ່ແຕກຕ່າງແທ້ໆ, ໂລກທີ່ມີປະເພນີ, ວັດທະນະທຳ, ແລະ ພາສາຂອງມັນເອງ. ເຮົາພົບເຫັນວ່າ ບໍ່ມີໃຜຈັກຄົນຫລືບ່ອນໃດເລີຍທີ່ເຮົາຈະເພິ່ງພາອາໄສໄດ້ ເພື່ອການແນະນຳໃນການເດີນທາງຂອງເຮົາຢູ່ໃນໂລກໃໝ່ນີ້. ທຳອິດການເດີນທາງກໍໜ້າຕື່ນເຕັ້ນ, ຄວາມຜິດຂອງເຮົາກໍໜ້າຕະຫລົກ, ແລ້ວມັນກາຍເປັນໜ້າທໍ້ຖອຍໃຈ ແລ້ວການທໍ້ຖອຍໃຈນັ້ນປ່ຽນເປັນການໃຈຮ້າຍ. ແລະ ເພາະການທໍ້ຖອຍໃຈ ແລະ ການໃຈຮ້າຍນີ້ ເຮົາຈຶ່ງໜີໄປ. ເຮົາກັບຄືນໄປຫາໂລກທີ່ເຮົາໜີມາ, ໂລກທີ່ເຮົາຮູ້ວ່າເຮົາເປັນໃຜ, ບ່ອນທີ່ເຮົາໄດ້ມີສ່ວນຮ່ວມ, ແລະ ບ່ອນທີ່ເຮົາເວົ້າພາສານັ້ນເປັນ"* [Ensign, *May 1999, 108*].

ໝາຍເຫດ

## ກິດຈະກຳ: ການສຶກສາສ່ວນຕົວ ຫລື ການສຶກສາກັບຄູ່ສອນສາດສະໜາ

ໃຫ້ອ່ານເລື່ອງທີ່ກ່າວມານັ້ນ. ໃຫ້ຂຽນຄຳຕອບຕໍ່ຄຳຖາມດັ່ງຕໍ່ໄປນີ້ໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ ຫລື ສົນທະນາຄຳຖາມກັບຄູ່ສອນສາດສະໜາຂອງທ່ານ. ໃຫ້ຕັ້ງເປົ້າໝາຍ ແລະ ແຜນການທີ່ເໝາະສົມ.

- ຕາມເລື່ອງນີ້, ແມ່ນຫຍັງແດ່ທີ່ເຮັດໃຫ້ຍາກສຳລັບສະມາຊິກໃໝ່ທີ່ຈະເຂັ້ມແຂງຕໍ່ໄປ?
- ການມີສະມາຊິກເຂົ້າກ່ຽວຂ້ອງຕັ້ງແຕ່ຕົ້ນຂອງການສອນ ສາມາດຊ່ອຍແກ້ໄຂບັນຫາເຫລົ່ານີ້ໄດ້ແນວໃດ?
- ໃຫ້ນຶກເຖິງຄົນທີ່ທ່ານກຳລັງສອນ. ເຮັດແນວໃດທ່ານຈຶ່ງຈະສາມາດໃຫ້ສະມາຊິກມີສ່ວນກ່ຽວຂ້ອງໄດ້ດີກວ່າເກົ່າ ເພື່ອຊ່ອຍຜູ້ສົນໃຈໃຫ້ມີໝູ່ເພື່ອນ ເມື່ອເຂົາເຈົ້າເລີ່ມມາໂບດ?

## ການສອນປະຈຳບ້ານ ແລະ ການຢ້ຽມສອນ

ປະທານສະເຕກ ແລະ ອະທິການ, ໂດຍການປະສານງານກັບປະທານເຜີຍແຜ່, ອາດຈະໃຊ້ຜູ້ສອນສາດສະໜາ ເພື່ອໄປຢ້ຽມຢາມສະມາຊິກທີ່ບໍ່ເຂັ້ມແຂງ ແລະ ຄອບຄົວທີ່ບໍ່ແມ່ນສະມາຊິກທັງໝົດ. ໃນກໍລະນີທີ່ເໝາະສົມ, ເຂົາເຈົ້າອາດຈະຂໍໃຫ້ຜູ້ສອນສາດສະໜາເຕັມເວລາມີສ່ວນຮ່ວມໃນການສອນປະຈຳບ້ານ ແລະ ການຢ້ຽມສອນ. ໂອກາດສອນເຫລົ່ານີ້ຄວນຊ່ອຍໃຫ້ສະມາຊິກເຂັ້ມແຂງຂຶ້ນ, ເພີ່ມຄວາມຊຳນານການສອນຂອງຜູ້ສອນສາດສະໜາ, ແລະ ຊ່ອຍຜູ້ສອນສາດສະໜາໃຫ້ໄດ້ຊື່ຜູ້ຖືກແນະນຳ. (see "Statement on Missionary Work," First Presidency letter, 11 Dec. 2002).

## ເຮັດວຽກງານກັບສະພາຫວອດເພື່ອຊ່ອຍສະມາຊິກໃໝ່ ແລະ ສະມາຊິກທີ່ບໍ່ເຂັ້ມແຂງໃຫ້ເຂັ້ມແຂງຂຶ້ນ

ການສອນ ແລະ ການໃຫ້ບັບຕິດສະມາແກ່ຜູ້ສົນໃຈ ເປັນວຽກງານພາຍໃຕ້ການຊີ້ນຳຂອງປະທານເຜີຍແຜ່ຂອງທ່ານ. ເຖິງຢ່າງໃດກໍຕາມ, ການປະກາດພະກິດຕິຄຸນຈະກ້າວໜ້າໄປດ້ວຍພະລັງເມື່ອຜູ້ສອນສາດສະໜາເຕັມເວລາ ແລະ ສະມາຊິກໃຊ້ຄວາມພະຍາຍາມ ແລະ ເຮັດວຽກງານໃຫ້ເປັນອັນໜຶ່ງອັນດຽວກັນ. ທ່ານອາດຈະຖືກເຊີນໃຫ້ໄປຮ່ວມການປະຊຸມສະພາຫວອດ ແລະ ປະຊຸມຄະນະກຳມະການບໍລິຫານງານຖານະປະໂລຫິດ. ສິ່ງສຳຄັນກວ່າໝູ່ໝົດທີ່ທ່ານຄວນເຮັດແມ່ນໃຫ້ແນ່ໃຈວ່າ ຜູ້ສົນໃຈຂອງທ່ານໄປໂບດ. ນີ້ໝາຍຄວາມວ່າ ທ່ານຕ້ອງໄປໂບດເປັນໝູ່ເຂົາເຈົ້າເລື້ອຍໆ. ຖ້າຫາກວ່າ ເວລາຂອງການປະຊຸມສະພາຫວອດ ຂັດກັບເວລາພາຄົນໄປໂບດ, ແລ້ວໃຫ້ເຮັດຂໍ້ທີສອງ (ພາຄົນໄປໂບດ). ໃນກໍລະນີນີ້, ໃຫ້ເອົາໃບສຳເນົາບັນທຶກຄວາມກ້າວໜ້າໃຫ້ຜູ້ນຳເຜີຍແຜ່ປະຈຳຫວອດ ແລະ ໃຫ້ແນ່ໃຈວ່າ ລາວມີຂໍ້ມູນທີ່ຈຳເປັນທັງໝົດສຳລັບສະພາຫວອດ ແລະ ຄະນະກຳມະການບໍລິຫານງານຖານະປະໂລຫິດ.


© 1999 Greg K. Olen. Courtesy Mill Pond Press. ຫ້າມລອກແບບ.

ປະທານ ກໍດອນ ບີ ຮິງລີ ໄດ້ກ່າວວ່າ:

"ຜູ້ປ່ຽນໃຈເຫລື້ອມໃສໃໝ່ທຸກຄົນຕ້ອງການສາມຢ່າງຄື:

"1. ໝູ່ເພື່ອນໃນສາດສະໜາຈັກທີ່ເຂົາເພິ່ງພາອາໄສໄດ້ຢູ່ຕະຫລອດ, ຜູ້ທີ່ຈະຊ່ອຍເຫລືອເຂົາ, ທີ່ຈະຕອບຄຳຖາມຂອງເຂົາ, ທີ່ຈະເຂົ້າໃຈບັນຫາຂອງເຂົາ.

"2. ການມອບໝາຍ. ກິດຈະກຳເປັນຄວາມສະຫລາດລ້ຳຂອງສາດສະໜາຈັກນີ້. ມັນເປັນວິທີທາງທີ່ເຮົາຈະກ້າວໜ້າ. ສັດທາ ແລະ ຄວາມຮັກຕໍ່ພະຜູ້ເປັນເຈົ້າຄືກັນກັບກ້າມເນື້ອໃນແຂນຂອງຂ້າພະເຈົ້າ. ຖ້າຫາກຂ້າພະເຈົ້າໃຊ້ມັນ, ມັນຈະ

ໝາຍເຫດ

ແຂງແຮງຂຶ້ນກວ່າເກົ່າ. ຖ້າຫາກຂ້າພະເຈົ້າເອົາຜ້າແຂວນມັນໄວ້, ມັນຈະອ່ອນແອລົງ. ຜູ້ປ່ຽນໃຈເຫລື້ອມໃສທຸກຄົນຕ້ອງມີການຮັບຜິດຊອບ. . . .

"3. ຜູ້ປ່ຽນໃຈເຫລື້ອມໃສທຸກຄົນຕ້ອງການ 'ບຳລຸງລ້ຽງດ້ວຍຄຳອັນປະເສີດຂອງພະເຈົ້າ' (ໂມໂລໄນ 6:4). ມັນສຳຄັນທີ່ສຸດທີ່ເຂົາເຂົ້າຮ່ວມກັບກຸ່ມຖານະປະໂລຫິດ ຫລື ສະຕີສົງເຄາະ, ອົງການຍິງໜຸ່ມ, ອົງການຊາຍໜຸ່ມ, ໂຮງຮຽນວັນອາທິດ, ຫລື ປະຖົມໄວ. ເຂົາຕ້ອງຖືກຊຸກຍູ້ໃຫ້ໄປຮ່ວມກອງປະຊຸມສິນລະລຶກ ເພື່ອຮັບສິນລະລຶກ, ເພື່ອຕໍ່ພັນທະສັນຍາທີ່ໄດ້ເຮັດໄວ້ຕອນຮັບບັບຕິສະມາ" (*Ensign*, May 1999, 106).

ສະພາຫວອດຈະເປັນຜູ້ນຳພາໃນການຈັດຫາໝູ່ເພື່ອນ, ຄວາມຮັບຜິດຊອບ, ແລະ ການບຳລຸງລ້ຽງທາງວິນຍານໃຫ້ແກ່ຜູ້ປ່ຽນໃຈເຫລື້ອມໃສໃໝ່. ທ່ານຈະຊ່ອຍເຂົາເຈົ້າຕາມທີ່ໄດ້ຖືກຂໍຮ້ອງ. ຜູ້ນຳຖານະປະໂລຫິດ ແລະ ສະມາຊິກຈະສ້າງມິດຕະພາບ, ໂດຍຄວາມຊ່ອຍເຫລືອຂອງທ່ານ.

## ມິດຕະພາບ

- ກ່ອນການຮັບບັບຕິສະມາ ແລະ ການຢືນຢັນ, ຖ້າເປັນໄປໄດ້ ໃຫ້ແນ່ໃຈວ່າ ມີສະມາຊິກຢູ່ນຳເມື່ອສອນບົດຮຽນທຸກບົດ. ສະມາຊິກເຫລົ່ານີ້ຄວນໄປຫາຜູ້ສົນໃຈເລື້ອຍໆ ເພື່ອຕອບຄຳຖາມຂອງເຂົາເຈົ້າ, ເພື່ອເຂົ້າໃຈການທ້າທາຍຂອງເຂົາເຈົ້າ, ແລະ ຊຸກຍູ້ເຂົາເຈົ້າ.
- ເຊື້ອເຊີນສະມາຊິກໃຫ້ໄປຮ່ວມພິທີບັບຕິສະມາ ແລະ ເພື່ອຕ້ອນຮັບຜູ້ປ່ຽນໃຈເຫລື້ອມໃສໃໝ່ເຂົ້າໃນຫວອດ. ສະມາຊິກຄວນຊ່ອຍຜູ້ປ່ຽນໃຈເຫລື້ອມໃສໃໝ່ໃຫ້ຮູ້ສຶກສະບາຍໃຈໃນກອງປະຊຸມໂບດຕ່າງໆ. ເຂົາເຈົ້າກໍຄວນແນະນຳສະມາຊິກໃໝ່ຕໍ່ສະມາຊິກຄົນອື່ນໆໃຫ້ຮູ້ຈັກນຳອີກ.



- ແນະນຳຜູ້ສົນໃຈໃຫ້ຮູ້ຈັກກັບອະທິການ ແລະ ທີ່ປຶກສາຂອງເພິ່ນ, ປະທານກຸ່ມແອວເດີ ແລະ ປະທານສະມາຄົມສະຕີສົງເຄາະ, ແລະ ຜູ້ນຳຄົນອື່ນໆຂອງຫວອດ ໃຫ້ໄວເທົ່າທີ່ຈະເປັນໄປໄດ້. ໃຫ້ອະທິບາຍບົດບາດຂອງອະທິການ ແລະ ຜູ້ນຳຄົນອື່ນໆຂອງຫວອດ.

## ໂອກາດທີ່ຈະຮັບໃຊ້

- ຊ່ອຍຜູ້ປ່ຽນໃຈເຫລື້ອມໃສຜູ້ຊາຍໃຫ້ເຂົ້າໃຈ ແລະ ຕຽມຮັບຖານະປະໂລຫິດແຫ່ງອາໂລນ ແລະ ຖານະປະໂລຫິດແຫ່ງເມນຄີເສເດັກ. ໃຫ້ອະທິບາຍວ່າ ກຸ່ມຖານະປະໂລຫິດໃຫ້ໂອກາດທີ່ຈະຮຽນຮູ້, ນະມັດສະການ, ແລະ ຮັບໃຊ້ນຳກັນ.
- ໃຫ້ຜູ້ປ່ຽນໃຈເຫລື້ອມໃສໃໝ່ ແລະ ສະມາຊິກທີ່ບໍ່ເຂັ້ມແຂງມີໂອກາດຮັບໃຊ້ ດັ່ງເຊັ່ນ ການຊ່ອຍເຫລືອແມ່ໝ້າຍ ຫລື ຜູ້ໃດຜູ້ໜຶ່ງທີ່ເຈັບປ່ວຍ ຫລື ຮັບໃຊ້ນຳໂຄງການສະຫວັດດີການ.
- ແນະນຳຜູ້ປ່ຽນໃຈເຫລື້ອມໃສຕໍ່ຜູ້ປຶກສາດ້ານປະຫວັດຄອບຄົວ ເພື່ອເຂົາເຈົ້າຈະໄດ້ເຮັດບັນທຶກຄອບຄົວ ແລະ ບັນທຶກລຳດັບເຊື້ອສາຍໃຫ້ສຳເລັດ. ຖ້າຫາກສະຖານະການອະນຸຍາດ, ໃຫ້ຊ່ອຍເຂົາເຈົ້າຕຽມຮັບບັບຕິສະມາໃນພະວິຫານແທນບັນພະບຸລຸດທີ່ລ່ວງລັບໄປແລ້ວຂອງເຂົາເຈົ້າ.
- ເຊື້ອເຊີນຜູ້ປ່ຽນໃຈເຫລື້ອມໃສໃຫ້ຕຽມສະມາຊິກໃນຄອບຄົວ ແລະ ໝູ່ເພື່ອນ ໃຫ້ຜູ້ສອນສາດສະໜາໄດ້ສອນ. ຜູ້ສອນສາດສະໜາຄວນຂໍຊື່ຜູ້ຖືກແນະນຳຈາກຜູ້ປ່ຽນໃຈເຫລື້ອມໃສໃໝ່ ແລະ ຈາກສະມາຊິກທີ່ບໍ່ເຂັ້ມແຂງ.

## ການບຳລຸງລ້ຽງດ້ວຍຄຳຂອງພະເຈົ້າ

- ສອນຫລັກທຳໃນບົດຮຽນທີ 5, "ກົດ ແລະ ພິທີການ" ໃຫ້ຈົບ.
- ເຕືອນຜູ້ປ່ຽນໃຈເຫລື້ອມໃສໃໝ່ ແລະ ສະມາຊິກທີ່ບໍ່ເຂັ້ມແຂງເຖິງຄຳໝັ້ນສັນຍາທີ່ເຂົາເຈົ້າໄດ້ເຮັດໄວ້ກ່ອນຮັບບັບຕິສະມາ ແລະ ເຖິງພັນທະສັນຍາທີ່ເຂົາເຈົ້າໄດ້ເຮັດໄວ້ຕອນເຂົາເຈົ້າຮັບບັບຕິສະມາ ແລະ ຮັບການຢືນຢັນ.

ໝາຍເຫດ

- ຊຸກຍູ້ເຂົາເຈົ້າໃຫ້ອະທິຖານເປັນສ່ວນຕົວ ແລະ ນຳຄອບຄົວທຸກໆມື້.
- ຊຸກຍູ້ເຂົາເຈົ້າໃຫ້ສຶກສາພະຄຳພີທຸກໆມື້, ໂດຍສະເພາະ ພະຄຳພີມໍມອນ.
- ຊ່ອຍເຮັດໃຫ້ປະຈັກພະຍານຂອງຜູ້ປ່ຽນໃຈເຫລື້ອມໃສໃໝ່ເຂັ້ມແຂງຂຶ້ນກ່ຽວກັບການຟື້ນຟູຂອງພະກິດຕິຄຸນຂອງພະເຢຊູຄຣິດຜ່ານສາດສະດາ ໂຈເຊັບ ສະມິດ. ໃຫ້ທົບທວນບົດຮຽນທີ່ທ່ານໄດ້ສອນກ່ອນບັບຕິສະມາ ແລະ ກ່ອນການຢືນຢັນ, ປ່ຽນການເຊື້ອເຊີນໃຫ້ເຮັດຄຳໝັ້ນສັນຍາ ຕາມຄວາມຕ້ອງການໃນປະຈຸບັນຂອງເຂົາເຈົ້າ.
- ໃຫ້ສອນຄວາມສຳຄັນຂອງການໄປໂບດແຕ່ລະວັນອາທິດ ແລະ ການຮັບສ່ວນສິນລະລຶກຢ່າງມີຄ່າຄວນຕໍ່ໄປ. ໄປໂບດ ແລະ ນັ່ງຢູ່ກັບຜູ້ປ່ຽນໃຈເຫລື້ອມໃສໃໝ່ ຫລື ສະມາຊິກທີ່ບໍ່ເຂັ້ມແຂງ.
- ເຊື້ອເຊີນເຂົາເຈົ້າໃຫ້ໄປຮ່ວມການຮຽນຫລັກທຳພະກິດຕິຄຸນລະຫວ່າງຊົ່ວໂມງຫ້ອງຮຽນວັນອາທິດ.
- ສອນເຂົາເຈົ້າໃຫ້ໃຊ້ປຶ້ມ *Family Home Evening Resource Book* ເພື່ອຈະໄດ້ຮູ້ວິທີ ຈັດການສັງສັນໃນຄອບຄົວໃນຕອນແລງວັນຈັນ.
- ຊຸກຍູ້ເຂົາເຈົ້າໃຫ້ແບ່ງປັນພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ກັບຄົນອື່ນໆ.
- ຊ່ອຍເຂົາເຈົ້າໃຫ້ເອົາຫ້ອງຮຽນເລື່ອງສາດສະໜາ ຫລື ຫ້ອງຮຽນໃນສະຖາບັນສຶກສາ.
- ບອກໃຫ້ເຂົາເຈົ້າຮູ້ກ່ຽວກັບແຫລ່ງຊ່ອຍເຫລືອຕ່າງໆຂອງສາດສະໜາຈັກ ດັ່ງເຊັ່ນ www.mormon.org, www.lds.org, ແລະ www.familysearch.org.

## ການສຶກສາພະຄຳພີ

### ການບຳລຸງລ້ຽງດ້ວຍຄຳຂອງພະເຈົ້າ

| | | |
|---|---|---|
| ໂມໄຊຢາ 18:18—20 | Alma 31:5 | ໂມໂລໄນ 6:4 |

### ການຮັບໃຊ້

| | | |
|---|---|---|
| ໂມໄຊຢາ 2:17 | ມັດທາຍ 25:40 | Guide to the Scriptures, "Service" |

## ແມ່ນຫຍັງຄືບົດບາດຂອງປະທານເຜີຍແຜ່ເຕັມເວລາ?

ປະທານເຜີຍແຜ່ຖືຂໍກະແຈສຳລັບການບັບຕິສະມາຂອງຜູ້ປ່ຽນໃຈເຫລື້ອມໃສ. ພາຍໃຕ້ການຊີ້ນຳຂອງເພິ່ນ, ຜູ້ສອນສາດສະໜາເຕັມເວລາມີຄວາມຮັບຜິດຊອບຕົ້ນຕໍ ຕໍ່ການສອນຜູ້ສົນໃຈ. ເຖິງຢ່າງໃດກໍຕາມ, ອະທິການຈະເປັນຜູ້ກຳກັບຄວາມກ້າວໜ້າ ແລະ ການຜູກມິດກັບຜູ້ສົນໃຈໃນເວລາທີ່ເຂົາເຈົ້າກຳລັງໄດ້ຮັບການສິດສອນຢູ່. ແຜນການເຜີຍແຜ່ຂອງຫວອດຈະຖືກນຳໄປເຮັດພາຍໃຕ້ອຳນາດການຄວບຄຸມຂອງອະທິການ. ປະທານເຜີຍແຜ່ຈະພົບກັບປະທານສະເຕກເປັນປະຈຳ ເພື່ອໃຫ້ແນ່ໃຈວ່າ ຜູ້ສອນສາດສະໜາເຕັມເວລາຮ່ວມເຮັດວຽກງານກັບຜູ້ນຳຖານະປະໂລຫິດໃນທ້ອງຖິ່ນ. ເພິ່ນຈະປະສານງານກ່ຽວກັບການເຜີຍແຜ່ ແລະ ຊ່ອຍເຫລືອປະທານສະເຕກໃຫ້ຄຳແນະນຳໃນຫລັກທຳ ແລະ ການປະຕິບັດວຽກງານເຜີຍແຜ່ສາດສະໜາ.

## ຄວາມຮັບຜິດຊອບຂອງຜູ້ນຳສະເຕກ ແລະ ຫວອດມີຫຍັງແດ່?

ຜູ້ນຳຂອງສາດສະໜາຈັກ ແລະ ສະມາຊິກໃນທ້ອງຖິ່ນເປັນມິດທີ່ດີທີ່ສຸດຂອງທ່ານ. ຈົ່ງໃຫ້ກຽດເຂົາເຈົ້າ ແລະ ພະຍາຍາມສ້າງຄວາມສຳພັນທີ່ດີກັບເຂົາເຈົ້າ. ເມື່ອທ່ານເຮັດວຽກກັບຜູ້ນຳເຫລົ່ານີ້, ໃຫ້ຈຳໄວ້ວ່າ ເຂົາເຈົ້າມີຄວາມຮັບຜິດຊອບອື່ນອີກທີ່ກ່ຽວກັບການເອີ້ນຂອງເຂົາເຈົ້າ. ໃຫ້ສະແຫວງຫາເພື່ອເປັນພອນ, ບໍ່ແມ່ນ ເປັນພາລະ, ຕໍ່ຜູ້ນຳສະເຕກ ແລະ ຫວອດຂອງທ່ານ. ທ່າທາງຂອງທ່ານຄວນເປັນຄືວ່າ, "ພວກເຮົາຊ່ອຍຫຍັງໄດ້ແດ່?" ໃຫ້ປຶກສາກັບອະທິການ ແລະ ຜູ້ນຳເຜີຍແຜ່ປະຈຳຫວອດກ່ຽວກັບແຜນການ ແລະ ກິດຈະກຳຂອງທ່ານ. ໃຫ້ແນ່ໃຈວ່າ ສິ່ງທີ່ທ່ານເຮັດ ສະໜັບສະໜູນແຜນການເຜີຍແຜ່ຂອງຫວອດ.

ບົດບາດຂອງຜູ້ນຳຖານະປະໂລຫິດໃນທ້ອງຖິ່ນກ່ຽວກັບວຽກງານເຜີຍແຜ່ໄດ້ບັນລະຍາຍໄວ້ຢູ່ຂ້າງລຸ່ມ. ການເຂົ້າໃຈບົດບາດຂອງເຂົາເຈົ້າ ຈະຊ່ອຍທ່ານໃຫ້ເຮັດວຽກງານກັບເຂົາເຈົ້າດີຂຶ້ນກວ່າເກົ່າ.

ໝາຍເຫດ

## ປະທານສະເຕກ

ປະທານສະເຕກຈະກຳກັບອະທິການໃນໜ້າທີ່ວຽກງານການເຜີຍແຜ່ຂອງເຂົາເຈົ້າ, ການຮັກສາສະມາຊິກໄວ້, ແລະ ການນຳຜູ້ຄືນກັບມາໂບດ . ໃນການສຳພາດປະຈຳເດືອນກັບອະທິການ, ເພິ່ນຈະສົນທະນາກ່ຽວກັບແຜນການ ແລະ ຄວາມກ້າວໜ້າຂອງຜູ້ສົນໃຈ ແລະ ສະມາຊິກໂດຍສະເພາະ. ເພິ່ນຈະເບິ່ງວ່າ ຄຳສອນທີ່ກ່ຽວກັບວຽກງານເຜີຍແຜ່ຖືກສອນເປັນປະຈຳໃນການປະຊຸມສະເຕກ ແລະ ຫວອດ ແລະ ວ່າຜູ້ນຳຖານະປະໂລຫິດ ແລະ ຄົນອື່ນໆກໍໄດ້ຮັບການອົບລົມໃນໜ້າທີ່ຮັບຜິດຊອບກ່ຽວກັບວຽກງານການເຜີຍແຜ່ຂອງເຂົາເຈົ້າ.

ພ້ອມນີ້ປະທານສະເຕກຈະພົບກັບປະທານເຜີຍແຜ່ເປັນປະຈຳນຳອີກ ເພື່ອປະສານວຽກງານການເຜີຍແຜ່, ຮ່ວມທັງການອົບລົມຜູ້ນຳ ແລະ ສະມາຊິກ, ການໃຊ້ ແລະ ການຈັດບ່ອນພັກໃຫ້ຜູ້ສອນສາດສະໜາເຕັມເວລາ, ແລະ ຊ່ອຍເຫລືອໃນການນຳຄືນກັບຄືນມາໂບດອີກ.

## ທີ່ປຶກສາຊັ້ນສູງ

ທີ່ປຶກສາຊັ້ນສູງຖືກມອບໝາຍໂດຍຝ່າຍປະທານສະເຕກ ເພື່ອສົ່ງເສີມວຽກງານເຜີຍແຜ່, ການຮັກສາສະມາຊິກໄວ້, ແລະ ການນຳຄືນກັບຄືນມາໂບດໃນສະເຕກ. ຕາມປົກກະຕິແລ້ວ ເພິ່ນຈະລາຍງານຄວາມກ້າວໜ້າຂອງວຽກງານນີ້ຕໍ່ຝ່າຍປະທານສະເຕກ. ເພິ່ນຍັງໃຫ້ແນ່ໃຈວ່າ ຜູ້ນຳເຜີຍແຜ່ປະຈຳຫວອດໄດ້ຮັບການອົບລົມ ໃນໜ້າທີ່ຂອງເຂົາເຈົ້າຢ່າງຖືກຕ້ອງ, ຮ່ວມດ້ວຍການຕຽມແຜນການເຜີຍແຜ່ຂອງຫວອດ.

## ອະທິການ

ອະທິການມີຄວາມຮັບຜິດຊອບຕໍ່ວຽກງານເຜີຍແຜ່, ການຮັກສາສະມາຊິກໄວ້, ແລະ ການນຳຄືນກັບຄືນມາໂບດ. ການມີສ່ວນຮ່ວມດ້ວຍຕົວເອງ ແລະ ການນຳພາຂອງເພິ່ນແມ່ນສຳຄັນຫລາຍ. ເພື່ອຈະຊ່ອຍໃຫ້ວຽກນີ້ສຳເລັດ, ອະທິການຈະເອີ້ນຜູ້ດຳລົງຖານະປະໂລຫິດແຫ່ງເມນຄີເສເດັກ ທີ່ມີຄ່າຄວນຄົນໜຶ່ງໃຫ້ຮັບໃຊ້ເປັນຜູ້ນຳເຜີຍແຜ່ປະຈຳຫວອດ. ເພິ່ນຈະເອີ້ນຜູ້ສອນສາດສະໜາປະຈຳຫວອດນຳອີກເປັນຈຳນວນທີ່ສົມຄວນກັບຄວາມຕ້ອງການໃນຫວອດ.



ອະທິການຈະໃຊ້ກຳມະການບໍລິຫານງານຖານະປະໂລຫິດ ແລະ ສະພາຫວອດເພື່ອປະສານວຽກງານເຜີຍແຜ່, ການຮັກສາສະມາຊິກໄວ້, ແລະ ການນຳຄືນກັບຄືນມາໂບດ. ເພິ່ນຈະໃຫ້ການຊີ້ນຳ ເພື່ອພັດທະນາ ແລະ ດຳເນີນແຜນການເຜີຍແຜ່ຂອງຫວອດ.

### ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ

ໃຫ້ຈັດເວລາເພື່ອໄປພົບກັບອະທິການ. ໃຫ້ສະແຫວງຫາຄຳແນະນຳຂອງເພິ່ນ ເຖິງວິທີທ່ານຈະສາມາດຮັບໃຊ້ໃຫ້ໄດ້ດີທີ່ສຸດໃນຫວອດ.

## ຜູ້ນຳຖານະປະໂລຫິດ ແລະ ຜູ້ນຳອົງການຊ່ອຍເຫລືອ

ຜູ້ນຳຖານະປະໂລຫິດ ແລະ ຜູ້ນຳອົງການຊ່ອຍເຫລືອຄວນທົບທວນເປັນປະຈຳ ເຖິງສະພາບການຂອງສະມາຊິກໃໝ່ ແລະ ສະມາຊິກທີ່ບໍ່ເຂັ້ມແຂງ ແລະ ວາງແຜນເພື່ອສ້າງມິດຕະພາບ ແລະ ຊ່ອຍເຂົາເຈົ້າໃຫ້ເຂັ້ມແຂງຂຶ້ນ. ພ້ອມນີ້ ເຂົາເຈົ້າກໍຄວນເຮັດວຽກຢ່າງໃກ້ຊິດກັບຜູ້ນຳເຜີຍແຜ່ປະຈຳຫວອດ ເພື່ອປະສານວຽກງານເຜີຍແຜ່, ການຮັກສາສະມາຊິກໄວ້, ແລະ ການນຳຄືນກັບຄືນມາໂບດນຳອີກ ຮ່ວມກັບຜູ້ສອນສາດສະໜາປະຈຳຫວອດ ແລະ ຜູ້ສອນສາດສະໜາເຕັມເວລາ.

ໝາຍເຫດ

## ຜູ້ນໍາເຜີຍແຜ່ປະຈໍາຫວອດ

ພາຍໃຕ້ການຊີ້ນໍາຂອງອະທິການ, ຜູ້ນໍາເຜີຍແຜ່ປະຈໍາຫວອດ:

- ເປັນຕົວຢ່າງໃນການແບ່ງປັນພະກິດຕິຄຸນໃຫ້ກັບຄົນອື່ນໆ ແລະ ຜູກມິດກັບຜູ້ສົນໃຈ, ຜູ້ປ່ຽນໃຈເຫລື້ອມໃສໃໝ່, ແລະ ສະມາຊິກທີ່ບໍ່ເຂັ້ມແຂງ.
- ປະສານວຽກງານຂອງຜູ້ສອນສາດສະໜາປະຈໍາຫວອດ ແລະ ຂອງຜູ້ສອນສາດສະໜາເຕັມເວລາກັບຜູ້ນໍາຖານະປະໂລຫິດ, ຜູ້ນໍາອົງການຊ່ອຍເຫລືອ, ແລະ ສະມາຊິກ.
- ໃຊ້ບັນທຶກຄວາມກ້າວໜ້າ, ບັນທຶກສິ່ງທີ່ໄດ້ປະຕິບັດຕໍ່ຜູ້ປ່ຽນໃຈເຫລື້ອມໃສ, ແລະ ບັນທຶກການປະຕິບັດ ແລະ ການສໍາພາດຂອງຝ່າຍອະທິການ ເພື່ອທົບທວນຄວາມກ້າວໜ້າຂອງຜູ້ສົນໃຈ, ຜູ້ປ່ຽນໃຈເຫລື້ອມໃສໃໝ່, ແລະ ສະມາຊິກທີ່ບໍ່ເຂັ້ມແຂງໃນການປະຊຸມຂອງກໍາມະການບໍລິຫານງານຖານະປະໂລຫິດ ແລະ ການປະຊຸມສະພາຫວອດ. ໃບບັນທຶກສິ່ງທີ່ໄດ້ປະຕິບັດຕໍ່ຜູ້ປ່ຽນໃຈເຫລື້ອມໃສ ແລະ ໃບບັນທຶກການປະຕິບັດ ແລະ ການສໍາພາດຂອງຝ່າຍອະທິການ ເປັນໃບລາຍງານທີ່ຕ້ອງປະກອບ ໂດຍການໃຊ້ຄອມພິວເຕີ ຢູ່ທີ່ໂບດ.
- ຈັດການປະຊຸມປະສານງານຂອງຜູ້ສອນສາດສະໜາທຸກອາທິດ.
- ຈັດພິທີຮັບບັບຕິສະມາຂອງຜູ້ປ່ຽນໃຈເຫລື້ອມໃສໃນຫວອດພ້ອມການຮ່ວມມືກັບຜູ້ສອນສາດສະໜາເຕັມເວລາ. ທໍາມະດາແລ້ວ ຜູ້ໜຶ່ງໃນຝ່າຍອະທິການ ຫລື ຜູ້ນໍາເຜີຍແຜ່ປະຈໍາຫວອດ ຈະເປັນຜູ້ຈັດພິທີເຫລົ່ານີ້.

ຜູ້ນໍາເຜີຍແຜ່ປະຈໍາຫວອດຈະຮັບໃຊ້ນໍາກໍາມະການບໍລິຫານງານຖານະປະໂລຫິດ, ສະພາຫວອດ, ແລະ ຄະນະສະຫວັດດີການ ແລະ ໄປຮ່ວມກອງປະຊຸມຜູ້ນໍາຖານະປະໂລຫິດຂອງສະເຕກນໍາອີກ.

## ຜູ້ສອນສາດສະໜາປະຈໍາຫວອດ

ອ້າຍເອື້ອຍນ້ອງທີ່ມີຄວາມເໝາະສົມຈະຖືກເອີ້ນໃຫ້ຮັບໃຊ້ເປັນຜູ້ສອນສາດສະໜາປະຈໍາຫວອດ. ເຂົາເຈົ້າຈະຖືກຄວບຄຸມໂດຍຜູ້ນໍາເຜີຍແຜ່ປະຈໍາຫວອດ.

ຜູ້ສອນສາດສະໜາປະຈໍາຫວອດຈະຊອກຫາ, ເປັນມິດ, ແລະ ສອນຜູ້ສົນໃຈ. ເຂົາເຈົ້າຈະຊີ້ນໍາ ແລະ ເປັນມິດກັບຜູ້ປ່ຽນໃຈເຫລື້ອມໃສໃໝ່ ແລະ ສະມາຊິກທີ່ບໍ່ເຂັ້ມແຂງ.

ຜູ້ສອນສາດສະໜາປະຈໍາຫວອດທີ່ດໍາລົງຖານະປະໂລຫິດແຫ່ງເມນຄີເສເດັກ ອາດຈະຖືກເອີ້ນໃຫ້ຮັບໃຊ້ເປັນຜູ້ລອງຜູ້ນໍາເຜີຍແຜ່ປະຈໍາຫວອດ.

## ການປະສານງານຂອງຜູ້ສອນສາດສະໜາ

ຕາມປົກກະຕິແລ້ວ ວຽກງານເຜີຍແຜ່ຈະຖືກນໍາມາປະສານກັນໃນການປະຊຸມຂອງກໍາມະການບໍລິຫານງານຖານະປະໂລຫິດ ແລະ ໃນການປະຊຸມສະພາຫວອດ ຜ່ານການໃຊ້ບັນທຶກຄວາມກ້າວໜ້າ, ທີ່ຜູ້ສອນສາດສະໜາເຕັມເວລາຕຽມໄວ້ໃຫ້. ຈຸດມຸ້ງໝາຍຂອງການເຜີຍແຜ່ໃນການປະຊຸມເຫລົ່ານີ້ ແມ່ນເພື່ອລາຍງານ, ວາງແຜນ, ແລະ ມອບໝາຍໜ້າທີ່ເພື່ອຊອກຫາ, ສອນ, ຜູກມິດ, ແລະ ນໍາຄົນກັບຄືນມາໂບດອີກ ດັ່ງທີ່ໄດ້ບັນລະຍາຍໄວ້ໃນວັກຕ່າງໆດັ່ງຕໍ່ໄປນີ້.

*ການຊອກຫາຄົນເພື່ອສອນ.* ກໍາມະການບໍລິຫານງານຖານະປະໂລຫິດ ແລະ ສະພາຫວອດ ຈະສົນທະນາແຜນການສໍາລັບການຕຽມຄົນໂດຍສະເພາະ ເພື່ອໃຫ້ຜູ້ສອນສາດສະໜາເຕັມເວລາສອນ. ເຂົາເຈົ້າຈະສົນທະນາຄວາມກ້າວໜ້າຂອງສະມາຊິກໂດຍສະເພາະໃນການຕຽມບຸກຄົນ ແລະ ຄອບຄົວສໍາລັບບົດຮຽນຂອງຜູ້ສອນສາດສະໜາ.

*ການສອນ ແລະ ການບັບຕິສະມາ.* ກໍາມະການບໍລິຫານງານຖານະປະໂລຫິດ ແລະ ສະພາຫວອດ ຈະທົບທວນບັນທຶກຄວາມກ້າວໜ້າແຕ່ລະອາທິດ, ທີ່ບັນລະຍາຍເຖິງຄວາມກ້າວໜ້າຂອງແຕ່ລະຄົນ ທີ່ຜູ້ສອນສາດສະໜາເຕັມເວລາກໍາລັງສອນຢູ່. ເຂົາເຈົ້າຈະວາງແຜນສໍາລັບການສອນໃນບ້ານຂອງສະມາຊິກ, ການຜູກມິດກັບຜູ້ສົນໃຈ, ແລະ ເບິ່ງວ່າສະມາຊິກມີສ່ວນຮ່ວມໃນພິທີບັບຕິສະມາ.

*ການຜູກມິດ ແລະ ການສອນສະມາຊິກໃໝ່.* ກໍາມະການບໍລິຫານງານຖານະປະໂລຫິດ ແລະ ສະພາຫວອດ ຈະທົບທວນບັນທຶກລາຍການ ທີ່ໄດ້ປະຕິບັດຕໍ່ຜູ້ປ່ຽນໃຈເຫລື້ອມໃສ ເພື່ອຕິດຕາມເບິ່ງຄວາມກ້າວໜ້າຂອງສະມາຊິກໃໝ່ແຕ່ລະຄົນ.

ໝາຍເຫດ

ພ້ອມນີ້ ເຂົາເຈົ້າຈະສົນທະນາວິທີທີ່ຈະຜູກມິດກັບສະມາຊິກໃໝ່ນຳອີກ. ຕາມການຂໍຮ້ອງຂອງອະທິການ, ເຂົາເຈົ້າຈະແນະນຳການເອີ້ນທີ່ຈະມອບໝາຍໃຫ້ຜູ້ປ່ຽນໃຈເຫລື້ອມໃສໃໝ່.

*ການຜູກມິດ ແລະ ການສອນສະມາຊິກທີ່ບໍ່ເຂັ້ມແຂງ:* ກຳມະການບໍລິຫານງານຖານະປະໂລຫິດ ແລະ ສະພາຫວອດຈະປະສານວຽກງານການນຳຄົນກັບຄືນມາໂບດອີກ ກັບກຸ່ມຖານະປະໂລຫິດ ແລະ ຜູ້ສອນສາດສະໜາເຕັມເວລາ. ເຂົາເຈົ້າຈະວາງແຜນວິທີຜູກມິດກັບສະມາຊິກທີ່ບໍ່ເຂັ້ມແຂງນຳອີກ, ໂດຍສະເພາະແລ້ວແມ່ນໂດຍການເຊື້ອເຊີນເຂົາເຈົ້າໃຫ້ໄປໂບດ ແລະ ໄປຮ່ວມກິດຈະກຳຂອງສາດສະໜາຈັກ.

## ການປະສານງານເພີ່ມເຕີມກັບຜູ້ນຳເຜີຍແຜ່ປະຈຳຫວອດ

ຕາມປົກກະຕິແລ້ວ ວຽກງານເຜີຍແຜ່ໃນຫວອດຈະຖືກນຳຂຶ້ນມາປະສານກັນໃນການປະຊຸມຂອງກຳມະການບໍລິຫານງານຖານະປະໂລຫິດ ແລະ ການປະຊຸມສະພາຫວອດ. ຖ້າຈຳເປັນຕ້ອງໄດ້ປະສານງານເພີ່ມເຕີມ, ຜູ້ນຳເຜີຍແຜ່ປະຈຳຫວອດ ສາມາດຈັດການປະຊຸມປະສານວຽກງານເຜີຍແຜ່ຂຶ້ນໄດ້ ກັບຜູ້ສອນສາດສະໜາເຕັມເວລາ. ຄົນອື່ນໆທີ່ອາດຈະເຊີນມາຮ່ວມການປະຊຸມນີ້ ແມ່ນຮ່ວມດ້ວຍຜູ້ສອນສາດສະໜາປະຈຳຫວອດ, ຜູ້ລອງຈາກກຸ່ມມະຫາປະໂລຫິດ, ທີ່ປຶກສາຄົນໜຶ່ງຈາກຝ່າຍປະທານກຸ່ມແອວເດີ, ແລະ ທີ່ປຶກສາຄົນໜຶ່ງຈາກຝ່າຍປະທານສະມາຄົມສະຕີສົງເຄາະ.

ຜູ້ທີ່ມາຮ່ວມການປະຊຸມອາດຈະທົບທວນ ແລະ ລາຍງານໜ້າທີ່ ແລະ ເປົ້າໝາຍຈາກການປະຊຸມເທື່ອກ່ອນ ແລະ ສົນທະນາແຜນການສຳລັບອາທິດທີ່ຈະມາເຖິງ. ຖ້າຈຳເປັນ, ເຂົາເຈົ້າອາດປະສານໜ້າທີ່ຂອງຜູ້ສອນສາດສະໜາປະຈຳຫວອດເພື່ອເຮັດວຽກຮ່ວມກັບຜູ້ສອນສາດສະໜາເຕັມເວລາ ແລະ ສົນທະນາວິທີທີ່ຈະຊ່ອຍໃຫ້ການເຮັດວຽກງານຮ່ວມກັນລະຫວ່າງຜູ້ສອນສາດສະໜາປະຈຳຫວອດ ແລະ ຜູ້ສອນສາດສະໜາເຕັມເວລາໃຫ້ໄດ້ຜົນດີກວ່າເກົ່າ.

## ແຜນການເຜີຍແຜ່ຂອງຫວອດ

ຫລາຍໆຫວອດໄດ້ພົບເຫັນວ່າ ການພັດທະນາແຜນການເຜີຍແຜ່ຂອງຫວອດ ສົ່ງເສີມວຽກງານການເຜີຍແຜ່ຂອງຜູ້ສອນສາດສະໜາປະຈຳຫວອດ. ແຜນນີ້ອາດຮ່ວມທັງເປົ້າໝາຍ, ການເລີ່ມຕົ້ນ, ແລະ ກິດຈະກຳຕ່າງໆ ເພື່ອຊ່ອຍສະມາຊິກຂອງຫວອດໃຫ້ເຊື້ອເຊີນຄົນມາຟັງພະກິດຕິຄຸນ. ບຸກຄົນ ແລະ ຄອບຄົວຈະໄດ້ຮັບຜົນປະໂຫຍດຈາກການພັດທະນາແຜນການແບບນີ້ ເພື່ອນຳພາຜູ້ສອນສາດສະໜາຂອງເຂົາເຈົ້າ.

ສະມາຊິກຄວນໃຊ້ທຸກວິທີທີ່ດີເພື່ອຊອກຫາຄົນທີ່ເຕັມໃຈຈະຟັງຂ່າວສານການຟື້ນຟູ. ເຂົາຄວນເນັ້ນເຖິງການຊອກຫາພໍ່, ແມ່, ແລະ ລູກໆທີ່ຈະເຂົ້າມາຮ່ວມສາດສະໜາຈັກເປັນຄອບຄົວ. ຕໍ່ໄປນີ້ແມ່ນຄຳແນະນຳບາງຢ່າງເພື່ອໃຫ້ພິຈາລະນາໃນການພັດທະນາແຜນການເຜີຍແຜ່.

- ໃຫ້ອະທິຖານ ຂໍໃຫ້ພະຜູ້ເປັນເຈົ້າຕຽມຈິດໃຈຂອງຄົນໃດຄົນໜຶ່ງ ເພື່ອຟັງພະກິດຕິຄຸນ. ພ້ອມນີ້ ໃຫ້ອະທິຖານເພື່ອຈະໄດ້ຮູ້ໃຈຂອງຜູ້ທີ່ພະອົງກຳລັງຕຽມໄວ້ໃຫ້ (see Alma 6:6). ປະທານ ກໍດອນ ບີ ຮິງລີ ໄດ້ສອນວ່າ, "ມັນຈະເປັນວັນທີ່ດີເດັ່ນ, ເມື່ອຄົນຂອງເຮົາບໍ່ໄດ້ອະທິຖານພຽງແຕ່ເພື່ອຜູ້ສອນສາດສະໜາທົ່ວໄປໃນໂລກເທົ່ານັ້ນ, ແຕ່ໄດ້ທູນຂໍໃຫ້ພະຜູ້ເປັນເຈົ້າຊ່ອຍເຫລືອຜູ້ສອນສາດສະໜາທີ່ຮັບໃຊ້ຢູ່ໃນຫວອດຂອງເຂົາເຈົ້າເອງນຳອີກ." ("Missionary Service," *First Worldwide Leadership Training Meeting*, Jan. 2003, 19).
- ໃຫ້ຮູ້ສຶກຕົວເຖິງໂອກາດທີ່ຈະເອື້ອມມືອອກຫາຜູ້ອື່ນ. ໃຫ້ເປັນເພື່ອນບ້ານທີ່ດີ ແລະ ເອື້ອມມືອອກຫາທຸກຄົນດ້ວຍຄວາມຮັກ.
- ຂໍໃຫ້ໝູ່ເພື່ອນ ແລະ ເພື່ອນບ້ານມາຮັບໃຊ້ຮ່ວມກັບສະມາຊິກໃນວຽກງານ ດັ່ງເຊັ່ນ ການຮັບໃຊ້ຊຸມຊົນ, ການຈັດຫາອາຫານໃຫ້ຜູ້ຂັດສົນ, ການສອນບົດຮຽນສັ້ນໆໃນການປະຊຸມເສີມສ້າງຂອງສະຕີສົງເຄາະ, ການຊ່ອຍໃນກິດຈະກຳຂອງຫວອດ, ການຊ່ອຍຄົນຍ້າຍ. ການເຮັດວຽກກັບກຸ່ມລູກເສືອ, ແລະ ການຊ່ອຍເຫລືອທາງປະຫວັດຄອບຄົວ ຫລືໂຄງການສະຫວັດດີການ.
- ເຊື້ອເຊີນຍາດພີ່ນ້ອງ, ໝູ່ເພື່ອນ, ແລະ ເພື່ອນບ້ານທີ່ບໍ່ໄດ້ເປັນສະມາຊິກ, ໃຫ້ໄປຮ່ວມພິທີບັບຕິດສະມາ, ການຢືນຢັນ, ແລະ ການແຕ່ງຕັ້ງຕໍ່ຖານະປະໂລຫິດ.
- ເຊື້ອເຊີນຜູ້ບໍ່ໄດ້ເປັນສະມາຊິກໃຫ້ມາຊ່ອຍເຫລືອໃນກິດຈະກຳພິເສດເຊັ່ນ ການລ້ຽງເຂົ້າເຊົ້າໃນວັນພັກສາກົນ.
- ຈັດການປະຊຸມ, ກິດຈະກຳ, ການປະຊຸມຝ່າຍເອີຊາຍ, ແລະ ກອງປະຊຸມຕ້ອນຮັບຂອງຫວອດໃຫ້ມີຄຸນນະພາບ ແລະ ໜ້າສົນໃຈ ທີ່ສະມາຊິກຈະຕື່ນເຕັ້ນຢາກເຊີນຜູ້ທີ່ເຂົາເຈົ້າຮູ້ຈັກໃຫ້ມາຮ່ວມ.

ໝາຍເຫດ

- ເຊື້ອເຊີນຄົນໃຫ້ມາຮ່ວມການສັງສັນໃນຄອບຄົວ.
- ໄປຢ້ຽມຢາມຄົນທີ່ປະສົບການປ່ຽນແປງໃນຊີວິດຂອງເຂົາເຈົ້າ, ດັ່ງເຊັ່ນ ການແຕ່ງງານ, ການເກີດ, ຫລື ການຕາຍ.
- ໄປຢ້ຽມຢາມ ແລະ ຊ່ວຍຄົນທີ່ຍ້າຍເຂົ້າມາຢູ່ໃນຄຸ້ມບ້ານ. ໃຫ້ແບ່ງປັນຂໍ້ມູນທີ່ກ່ຽວກັບຊຸມຊົນ, ຄຸ້ມບ້ານ, ແລະ ສາດສະໜາຈັກ.
- ໃຫ້ໃຊ້ທຸກໆໂອກາດເພື່ອກ່າວເຖິງພະກິດຕິຄຸນ. ໃຫ້ສົນທະນາຫົວຂໍ້ດັ່ງເຊັ່ນ ພະຜູ້ຊ່ວຍໃຫ້ລອດ, ພະຄຳພີມໍມອນ, ພະຄຳພີໄບເບິ້ນ, ຈຸດປະສົງຂອງຊີວິດ, ຄອບຄົວ, ແລະ ປະຫວັດຄອບຄົວ.
- ຊຸກຍູ້ຄົນໜຸ່ມໃຫ້ເປັນມິດກັບຄົນໜຸ່ມຄົນອື່ນໆ ແລະ ຊວນເຂົາມາໂບດ ແລະ ມາຮ່ວມກິດຈະກຳຂອງສາດສະໜາຈັກ.
- ເຮັດວຽກງານກັບຄອບຄົວທີ່ບໍ່ແມ່ນສະມາຊິກທັງໝົດ.
- ຈັດກອງປະຊຸມສິນລະລຶກທີ່ເບີກບານທາງວິນຍານ.

## ກິດຈະກຳ: ການສຶກສາກັບຄູ່ສອນສາດສະໜາ

- ໃຫ້ອ່ານ ແລະ ສົນທະນາໜ້າທີ 34–37 ໃນປຶ້ມ *True to the Faith*, "Church Administration." ກັບຄູ່ສອນສາດສະໜາຂອງທ່ານ.
- ແບ່ງປັນສິ່ງທີ່ທ່ານໄດ້ຮຽນຮູ້ກັບຄູ່ສອນສາດສະໜາຂອງທ່ານ ແລະ ຂຽນມັນໄວ້ໃນປຶ້ມບັນທຶກການສຶກສາຂອງທ່ານ.
- ໃຫ້ສົນທະນາວິທີທີ່ຄວາມຮູ້ຂອງທ່ານຈະມີອິດທິພົນແນວໃດຕໍ່ວິທີທີ່ທ່ານຈະເຮັດວຽກງານກັບຜູ້ນຳໃນສາດສະໜາຈັກ.

## ຄຳໝັ້ນສັນຍາທີ່ຈະເຂັ້ມແຂງຕໍ່ໄປຢູ່ໃນສາດສະໜາຈັກ

ວຽກງານການເຜີຍແຜ່ມີຜົນສະທ້ອນທີ່ຍິ່ງໃຫຍ່ທີ່ສຸດ ເມື່ອຄົນໄດ້ເຮັດ ແລະ ຮັກສາຄຳໝັ້ນສັນຍາວ່າ ຈະເຂັ້ມແຂງຕໍ່ໄປຢູ່ໃນສາດສະໜາຈັກຕະຫລອດຊີວິດຂອງເຂົາເຈົ້າ. ມັນບໍ່ພຽງພໍທີ່ຄົນຈະເຂົ້າມາໃນສາດສະໜາຈັກເທົ່ານັ້ນ. ເຂົາຕ້ອງເຂົ້າມາຢູ່. ການສອນ ແລະ ການເຊື້ອເຊີນຂອງທ່ານ ຕ້ອງແນໃສ່ຈຸດປະສົງນີ້. ເພື່ອຈະໄດ້ຮັບພອນທັງໝົດທີ່ພະບິດາເທິງສະຫວັນມີໄວ້ສຳລັບເຂົາ, ສະມາຊິກຕ້ອງປະຕິບັດຕາມພະກິດຕິຄຸນ ແລະ ເຂັ້ມແຂງຢູ່ໃນສາດສະໜາຈັກຕໍ່ໄປ.

ນີໄຟໄດ້ສອນວ່າ: " ແລະ ບັດນີ້, ພີ່ນ້ອງທີ່ຮັກຂອງຂ້າພະເຈົ້າ, ຫລັງຈາກທ່ານເຂົ້າໄປໃນທາງຊື່ ແລະ ແຄບນີ້ແລ້ວ, ຂ້າພະເຈົ້າຢາກຖາມວ່າ ກະທຳທຸກຢ່າງແລ້ວບໍ? ຈົ່ງເບິ່ງ, ຂ້າພະເຈົ້າກ່າວກັບທ່ານວ່າ, ບໍ່ເລີຍ; . . . ທ່ານຕ້ອງມຸ້ງໜ້າດ້ວຍຄວາມໝັ້ນຄົງໃນພະຄຣິດ . . . ແລະ ອົດທົນຈົນເຖິງທີ່ສຸດ, ແລ້ວຈົ່ງເບິ່ງ, ພະບິດາກ່າວດັ່ງນີ້: ເຈົ້າຈະມີຊີວິດນິລັນດອນ" (2 ນີໄຟ 31:19–20).

ຈົ່ງໃຊ້ຄວາມພະຍາຍາມທັງໝົດ ເພື່ອຊ່ວຍໃຫ້ຄົນເໝາະສົມທີ່ຈະໄດ້ຮັບ "ຊີວິດນິລັນດອນ, ເຊິ່ງເປັນຂອງປະທານທີ່ຍິ່ງໃຫຍ່ທີ່ສຸດໃນຂອງປະທານທັງໝົດຂອງພະເຈົ້າ (see D&C 14:7).

## ໃຫ້ຈື່ຈຳສິ່ງນີ້

- ສ້າງຄວາມສຳພັນທີ່ເຂັ້ມແຂງກັບອະທິການ ແລະ ສະມາຊິກຂອງສະພາຫວອດ.
- ເຂົ້າຮ່ວມການປະຊຸມຂອງກຳມະການບໍລິຫານງານຖານະປະໂລຫິດ ແລະ ການປະຊຸມສະພາຫວອດໃນທາງທີ່ເໝາະສົມ.
- ໃຫ້ການຮັບໃຊ້ຕໍ່ສະພາຫວອດ. ເມື່ອສະມາຊິກໃນສະພາຂໍຄວາມຊ່ວຍເຫລືອຈາກທ່ານ:
  - ໃຫ້ເຕັມໃຈທີ່ຈະຜູກມິດກັບຜູ້ປ່ຽນໃຈເຫລື້ອມໃສ ແລະ ສະມາຊິກທີ່ບໍ່ເຂັ້ມແຂງ, ຊ່ວຍເຂົາເຈົ້າໃນໜ້າທີ່ການເອີ້ນຂອງເຂົາເຈົ້າ ແລະ ຮັບໃຊ້ເມື່ອໂອກາດອຳນວຍ, ແລະ ສອນບົດຮຽນຂອງຜູ້ສອນສາດສະໜາໃຫ້ເຂົາເຈົ້າອີກ.
  - ພ້ອມກັນກັບສະມາຊິກ, ໃຫ້ສອນບົດຮຽນ "ກົດ ແລະ ພິທີການ" ໃຫ້ຜູ້ປ່ຽນໃຈເຫລື້ອມໃສໃໝ່.

ໝາຍເຫດ

# ແນວຄິດສຳລັບການສຶກສາ ແລະ ການນຳໃຊ້

## ການສຶກສາສ່ວນຕົວ

- ໂດຍການໃຊ້ປະຕິທິນປະຈຳວັນຂອງທ່ານ, ໃຫ້ວາງແຜນທີ່ຈະເວົ້າລົມກັບຜູ້ປ່ຽນໃຈເຫລື້ອມໃສໃໝ່ ແລະ ສະມາຊິກທີ່ຫາກໍກັບຄືນມາໂບດ ເຖິງການປ່ຽນແປງຊີວິດຂອງເຂົາເຈົ້າ ແລະ ການໄປໂບດ. ແມ່ນຫຍັງທີ່ຊ່ອຍເຂົາເຈົ້າຫລາຍທີ່ສຸດ? ໃນປຶ້ມບັນທຶກການສຶກສາຂອງທ່ານ, ໃຫ້ຂຽນຄວາມຄິດຂອງທ່ານກ່ຽວກັບປະສົບການຂອງເຂົາເຈົ້າ. ທ່ານໄດ້ຮຽນຫຍັງແດ່ທີ່ຈະຊ່ອຍທ່ານໃນການເຮັດວຽກກັບຜູ້ສົນໃຈຂອງທ່ານ ໃນປະຈຸບັນນີ້.

- ໃຫ້ສຶກສາ 2 ນີໄຟ 31:18–20; Alma 26:1–7; ແອລະມາ 32:32–43; ແລະ ໂມໂລໄນ 6. ໃຫ້ຂຽນສິ່ງທີ່ທ່ານຮຽນຮູ້ຈາກຂໍ້ພະຄຳພີເຫລົ່ານີ້ ກ່ຽວກັບການຊ່ອຍຜູ້ປ່ຽນໃຈເຫລື້ອມໃສໃໝ່ໃຫ້ເຂັ້ມແຂງຂຶ້ນ.

## ການສຶກສາກັບຄູ່ສອນສາດສະໜາ

- ໃນການປະຊຸມສະພາຫວອດ, ໃຫ້ຖາມອະທິການ ຖ້າຫາກວ່າມີສະມາຊິກທີ່ບໍ່ເຂັ້ມແຂງຄົນໃດບໍ່ຢູ່ໃນເຂດຂອງທ່ານ ທີ່ເພິ່ນຢາກໃຫ້ທ່ານໄປຢ້ຽມຢາມໃນອາທິດນັ້ນ. ເມື່ອທ່ານໄປຢ້ຽມຢາມສະມາຊິກທີ່ບໍ່ເຂັ້ມແຂງເຫລົ່ານີ້, ໃຫ້ສະແຫວງຫາເພື່ອສ້າງສັດທາຂອງເຂົາເຈົ້າໃນພະເຢຊູຄຣິດ. ຂໍໃຫ້ເຂົາເຈົ້າແນະນຳຊື່ຂອງບາງຄົນ.

- ໃຫ້ສຶກສາ 1 ໂກລິນໂທ 3:2; ເຮັບເລີ 5:12; ແລະ Doctrine and Covenants 19:22. ນ້ຳນົມທີ່ໄດ້ອ້າງເຖິງຄືຫຍັງ? ອາຫານແຂງຄືຫຍັງ? ໃຫ້ປຽບທຽບຄຳຕອບຂອງທ່ານກັບຄຳສອນໃນບົດ "ເຮົາຈະສຶກສາ ແລະ ສອນຫຍັງ?" ເປັນຫຍັງທ່ານຕ້ອງໃຫ້ນ້ຳນົມ ແລະ ອາຫານແຂງໃນລຳດັບທີ່ເໝາະສົມ ແລະ ໃນຈຳນວນທີ່ເໝາະສົມ? ທ່ານຈະເຮັດແບບນີ້ດ້ວຍວິທີໃດ?

- ໃຫ້ອ່ານຂໍ້ຄວາມຕໍ່ໄປນີ້, ທີ່ປະທານ ໂຢເຊັບ ແອັບ ສະມິດ ໄດ້ບັນຍາຍເຖິງຄວາມຮູ້ສຶກຂອງເພິ່ນ ໃນເວລາທີ່ເພິ່ນຮັບບັບຕິດສະມາ:

  "ຄວາມຮູ້ສຶກທີ່ໄດ້ມາສູ່ຂ້າພະເຈົ້າເປັນຄວາມສະຫງົບທີ່ບໍລິສຸດ, ເປັນຄວາມຮັກ ແລະ ແສງສະຫວ່າງ. ຂ້າພະເຈົ້າໄດ້ຮູ້ສຶກໃນຈິດວິນຍານຂອງຂ້າພະເຈົ້າວ່າ ຖ້າຫາກຂ້າພະເຈົ້າໄດ້ເຮັດບາບ— ແລະ ແນ່ນອນແທ້ ຂ້າພະເຈົ້າບໍ່ໄດ້ປາດສະຈາກບາບ— ມັນໄດ້ໃຫ້ອະໄພຂ້າພະເຈົ້າແລ້ວ; ຂ້າພະເຈົ້າໄດ້ບໍລິສຸດຈາກບາບແທ້ໆ; ຂ້າພະເຈົ້າມີຄວາມປາບປື້ມໃຈຫລາຍ, ແລະ ຂ້າພະເຈົ້າໄດ້ຮູ້ສຶກວ່າ ຂ້າພະເຈົ້າຈະບໍ່ເຮັດໃຫ້ແມງໄມ້ນ້ອຍໆຕົວໜຶ່ງຢູ່ໃຕ້ຕີນຂອງຂ້າພະເຈົ້າ ໄດ້ຮັບຄວາມເຈັບປວດ. ຂ້າພະເຈົ້າຮູ້ສຶກຄືວ່າ ຂ້າພະເຈົ້າມີແຕ່ຢາກເຮັດຄວາມດີໃນທຸກບ່ອນ ຕໍ່ທຸກຄົນ ແລະ ຕໍ່ທຸກສິ່ງ. ຂ້າພະເຈົ້າຮູ້ສຶກເຖິງຊີວິດໃໝ່, ຄວາມປາດຖະໜາໃໝ່ທີ່ຈະເຮັດສິ່ງທີ່ຊອບທຳ. ບໍ່ມີຄວາມປາດຖະໜາທີ່ຈະເຮັດຄວາມຊົ່ວຮ້າຍແມ່ນແຕ່ໜ້ອຍດຽວເຫລືອຢູ່ໃນຈິດວິນຍານຂອງຂ້າພະເຈົ້າເລີຍ. . . . ນີ້ຄືອິດທິພົນທີ່ມາສູ່ຂ້າພະເຈົ້າ, ແລະ ຂ້າພະເຈົ້າຮູ້ວ່າ ມັນມາຈາກພະເຈົ້າ, ແລະ ມັນໄດ້ເປັນ ແລະ ຈະເປັນພະຍານທີ່ເປັນຢູ່ແກ່ຂ້າພະເຈົ້າ ວ່າພະຜູ້ເປັນເຈົ້າຍອມຮັບຂ້າພະເຈົ້າແລ້ວ" (*Gospel Doctrine*, 5th ed. [1939], 96).

  ບັດນີ້ໃຫ້ອ່ານສິ່ງທີ່ ປະທານ ສະມິດ ໄດ້ກ່າວກ່ຽວກັບຄວາມຮູ້ສຶກຂອງເພິ່ນ ຫລັງຈາກການຮັບບັບຕິດສະມາຂອງເພິ່ນໄດ້ເປັນເວລາດົນນານ:

ໝາຍເຫດ

ໂອ້! ຂ້າພະເຈົ້າຢາກເກັບພະວິນຍານ ແລະ ຄວາມປາດຖະໜາທີ່ຈິງຈັງອັນດຽວກັນນັ້ນໄວ້ໃນຈິດໃຈຂອງຂ້າພະເຈົ້າເດ້ ໃນທຸກເວລາໃນຊີວິດຂອງຂ້າພະເຈົ້າ ຕັ້ງແຕ່ [ວັນຮັບບັບຕິດສະມາຂອງຂ້າພະເຈົ້າ] ຈົນເຖິງວັນນີ້. ແຕ່ເຮົາຫລາຍຄົນທີ່ໄດ້ຮັບພະຍານນັ້ນ, ຊີວິດໃໝ່ນັ້ນ, ການປ່ຽນໃຈນັ້ນ, ເຖິງແມ່ນວ່າເຮົາອາດໄດ້ເຮັດຜິດໃນການຕັດສິນ ຫລື ໄດ້ເຮັດຄວາມຜິດຫລາຍຢ່າງ, ແລະ ບາງຄັ້ງບໍ່ໄດ້ດຳລົງຊີວິດຕາມມາດຕະຖານທີ່ແທ້ຈິງໃນຊີວິດຂອງເຮົາ, ແຕ່ເຮົາໄດ້ກັບໃຈຈາກຄວາມຊົ່ວຮ້າຍ, ແລະ ບາງຄັ້ງບາງຄາວ ເຮົາໄດ້ສະແຫວງຫາຄວາມໃຫ້ອະໄພບາບ ຈາກພະຫັດຂອງພະຜູ້ເປັນເຈົ້າ; ເພາະສະນັ້ນ ຄວາມປາດຖະໜາ ແລະ ຈຸດປະສົງອັນດຽວທີ່ໄດ້ກຸ້ມໄປທົ່ວຈິດວິນຍານຂອງເຮົາ ຕອນເຮົາໄດ້ຮັບບັບຕິດສະມາ ແລະ ໄດ້ຮັບການປົດບາບຂອງເຮົາ, ຍັງເປັນເຈົ້າຂອງຫົວໃຈຂອງເຮົາຢູ່ຈົນເຖິງວັນນີ້, ແລະ ຍັງເປັນສິ່ງປົກຄອງຄວາມຮູ້ສຶກ ແລະ ຄວາມຮັກຂອງຈິດວິນຍານຂອງເຮົາຢູ່” (*Gospel Doctrine*, 96).

- ທ່ານໄດ້ຮຽນຮູ້ຫຍັງແດ່ຈາກ ປະທານ ສະມິດ ກ່ຽວກັບປະຈັກພະຍານຂອງເພິ່ນເອງ ແລະ ຄຳໝັ້ນສັນຍາທີ່ຈະດຳລົງຊີວິດຕາມພະກິດຕິຄຸນ?
- ທ່ານໄດ້ຮຽນຮູ້ຫຍັງແດ່ກ່ຽວກັບຄວາມຫຍຸ້ງຍາກທີ່ຜູ້ປ່ຽນໃຈເຫລື້ອມໃສໃໝ່, ແມ່ນແຕ່ສາດສະດາໃນອະນາຄົດ, ໄດ້ປະເຊີນຫລັງຈາກບັບຕິດສະມາ?
- ໃຫ້ນຶກເຖິງຜູ້ປ່ຽນໃຈເຫລື້ອມໃສໃໝ່ໃນບໍ່ດົນມານີ້ ແລະ ສະມາຊິກທີ່ບໍ່ເຂັ້ມແຂງ, ທ່ານຈະສາມາດເຮັດຫຍັງໄດ້ແດ່ ເພື່ອຊ່ອຍເຂົາເຈົ້າໃຫ້ມີ “ຄວາມປາດຖະໜາ ແລະ ຈຸດປະສົງ” ທີ່ເຂົາເຈົ້າເຄີຍມີ?

## ການປະຊຸມທ້ອງຖິ່ນ ແລະ ກອງປະຊຸມເຂດ

- ເຊື້ອເຊີນອະທິການໃຫ້ມາກ່າວຄຳປາໄສເຖິງການທ້າທາຍໃນການເຮັດວຽກກັບສະມາຊິກທີ່ບໍ່ເຂັ້ມແຂງ ແລະ ຜູ້ປ່ຽນໃຈເຫລື້ອມໃສໃໝ່. ຂໍໃຫ້ເພິ່ນເນັ້ນວິທີທີ່ຜູ້ສອນສາດສະໜາຈະຊ່ອຍໄດ້ໃນການທ້າທາຍເຫລົ່ານີ້.
- ໃຫ້ສົນທະນາຄຳອຸບປະມາເລື່ອງແກະທີ່ເສຍ, ເງິນທີ່ເສຍ, ແລະ ລູກຊາຍທີ່ເສຍ (ເບິ່ງ ລູກາ 15).

## ປະທານເຜີຍແຜ່

- ຈົ່ງເຮັດວຽກງານຮ່ວມກັບຜູ້ນຳຖານະປະໂລຫິດໃນທ້ອງຖິ່ນ ເພື່ອຊຸກຍູ້ເຂົາເຈົ້າໃຫ້ຊ່ອຍຜູ້ປ່ຽນໃຈເຫລື້ອມໃສໃໝ່:
  - ໃຫ້ໄດ້ຮັບການແຕ່ງຕັ້ງຕໍ່ຖານະປະໂລຫິດ.
  - ໃຫ້ຕ້ອນຮັບຄູສອນປະຈຳບ້ານ.
  - ໃຫ້ຕຽມເອົາຊື່ຂອງບັນພະບຸລຸດໄປພະວິຫານ ແລະ ຮັບບັບຕິດສະມາແທນຄົນຕາຍ.
  - ຟັງບົດຮຽນ “ກົດ ແລະ ພິທີການ” ໂດຍມີຄູສອນປະຈຳບ້ານຮ່ວມຢູ່ນຳ.
- ສອນຜູ້ນຳໃນທ້ອງຖິ່ນເຖິງວິທີທີ່ຈະໃຊ້ຜູ້ສອນສາດສະໜາໃນສະພາຫວອດ.
- ສອນຜູ້ນຳໃນທ້ອງຖິ່ນເຖິງຈຸດປະສົງ ແລະ ການໃຊ້ບັນທຶກຄວາມກ້າວໜ້າ.
- ບາງຄັ້ງບາງຄາວ ຂໍໃຫ້ຜູ້ສອນສາດສະໜາເອົາບັນທຶກຄວາມກ້າວໜ້າຂອງເຂົາເຈົ້າມາໃຫ້ທ່ານເບິ່ງ.

ໝາຍເຫດ

- ບາງຄັ້ງບາງຄາວ ໃຫ້ຕິດຕໍ່ຫາຜູ້ປ່ຽນໃຈເຫລື້ອມໃສໃໝ່ ເພື່ອເບິ່ງວ່າເຂົາເຈົ້າເປັນຈັ່ງໃດ ແລະ ວ່າຜູ້ສອນສາດສະໜາ ແລະ ສະມາຊິກຈະຊ່ອຍໄດ້ແນວໃດ.
- ເຊື້ອເຊີນຜູ້ນຳສະເຕກ ຫລື ຫວອດໃຫ້ມາກ່າວຄຳປາໄສຕໍ່ຜູ້ສອນສາດສະໜາຂອງທ່ານ ເພື່ອອະທິບາຍວິທີທີ່ຜູ້ສອນສາດສະໜາສາມາດຊ່ອຍເຫລືອໄດ້ຫລາຍທີ່ສຸດ.
- ເຊື້ອເຊີນຜູ້ປ່ຽນໃຈເຫລື້ອມໃສໃນບໍ່ດົນມານີ້ ໃຫ້ມາກ່າວຄຳປາໄສຕໍ່ຜູ້ສອນສາດສະໜາ ແລະ ເລົ່າປະສົບການຂອງການເປັນສະມາຊິກໃໝ່ໃນສາດສະໜາຈັກ.
- ບາງຄັ້ງບາງຄາວ ຂໍໃຫ້ສະມາຊິກທີ່ເປັນຜູ້ປ່ຽນໃຈເຫລື້ອມໃສ ມາແບ່ງປັນປະສົບການທາງການປ່ຽນໃຈຂອງເຂົາໃນກອງປະຊຸມເຂດ.

## ກ


ການກັບໃຈ, 73, 212–14
  ແລະ ຄໍາໝັ້ນສັນຍາ, 221
ການກັບມາເກີດອີກ, ແລະ ຄວາມເປັນຄືນມາຈາກຕາຍ, 61
ການຂັດຄ້ານ, ວິທີຕອບ, ດ້ວຍພະຄໍາພີມໍມອນ, 127
ການຄືນສະພາບເດີມ, ການອະທິບາຍ, 83
ການຈັດຕັ້ງ, 39
ການສະເດັດມາຄັ້ງທີສອງຂອງພະເຢຊູຄຣິດ, 42
ການສັງສັນໃນຄອບຄົວ, 99
ການສ້າງ, ໂລກ, 65
ການສ້າງສັນສາດສະໜາຈັກ, 10
ການສຶກສາກັບຄູ່ສອນສາດສະໜາ, ເປົ້າໝາຍ, ix–x
  ລາຍການ, viii
ການສຶກສາສ່ວນຕົວ, ເປົ້າໝາຍ, ix
  ລາຍການ, viii
ການສືບປະຫວັດ, ແຫລ່ງໜຶ່ງສໍາລັບການຊອກຫາຜູ້ສົນໃຈ, 186–88
ການສໍາພາດສໍາລັບບັບຕິດສະມາ, ວິທີດໍາເນີນ, 233–34
  ການຕຽມຜູ້ສົນໃຈສໍາລັບ, 232–33
  ຄໍາຖາມ, 234
  ຜູ້ດໍາເນີນ, 234–35
ການຊົດໃຊ້, 35–38, 39, 55, 59–60, 70–71
  ການອະທິບາຍ, 68
ການເຊື່ອຟັງ, 143
  ພະບັນຍັດຂໍ້ໜຶ່ງ, 85
ການເຊື້ອເຊີນໃຫ້ເຮັດຄໍາໝັ້ນສັນຍາ, 221–22
ການເຊົາຈາກການຕິດແສດ, 212–13
ການຊອກຫາ, ແລະ ການສອນ, 182–83
  ໂດຍພະວິນຍານ, 180
  ນໍາສະມາຊິກ, 184–86
ການຊອກຫາຄົນເພື່ອສອນ, 179
ການຊອກຫາຜູ້ສົນໃຈ, ຄໍາແນະນໍາສໍາລັບ, 191–92
ການຕັ້ງເປົ້າໝາຍ, 159
ການຕາຍທາງວິນຍານ, ການອະທິບາຍ, 69
ການຕາຍທາງຮ່າງກາຍ, ການອະທິບາຍ, 68
ການຕິດຕາມຜົນຕໍ່ໄປ, ແລະ ຄໍາໝັ້ນສັນຍາ, 226–27
ການແຕ່ງງານນິລັນດອນ, 99
ການຕົກຂອງອາດາມ ແລະ ເອວາ, 57–58
  ການອະທິບາຍ, 68
ການເຕືອນ, ໃນການຮັບການເປີດເຜີຍ, 114
ການຖືສິນອົດເຂົ້າ, ກົດຂອງ, 93–94
ການໄຖ່, ການອະທິບາຍ, 68–69
ການທ່ອງຈໍາ, ແລະ ການສອນ, viii
ການປະຊຸມ, ການປະສານງານຂອງຜູ້ສອນສາດສະໜາ, 247
ການປະຊຸມທ້ອງຖິ່ນ, ແລະ ສຶກສາ, ix
  ເປົ້າໝາຍ, ix
ການປະຖິ້ມຄວາມເຊື່ອ, ການອະທິບາຍ, 37
  ທີ່ຍິ່ງໃຫຍ່, 39–40
ການເປັນຄືນມາຈາກຕາຍ, 61
  ການອະທິບາຍ, 59, 69
ການແປ, ຄໍາສັບທີ່ບໍ່ຮູ້ຈັກ, 23
ການປ່ຽນໃຈເຫລື້ອມໃສ, ບົດບາດຂອງຜູ້ສອນສາດສະໜາໃນ, 106–107
  ບົດບາດຂອງພະວິນຍານໃນ, 106–7
ການປ່ຽນແປງໄດ້, ໃນການສຶກສາ, vii
  ໃນການສອນ, vii
ການເປີດເຜີຍ, ສ່ວນຕົວ, 103–4
ການຜູກມິດ, ກັບສະມາຊິກໃໝ່, 238
ການພິພາກສາ, ການອະທິບາຍ, 68
  ຄັ້ງສຸດທ້າຍ, 61
ການຟື້ນຟູ, ຂ່າວສານຂອງ, ຊີ້ແຈງ, 6–9
  ພະກິດຕິຄຸນ, 41–42
ການໝາຍພະຄໍາພີ, 24
ການຟັງ, ເພື່ອພັດທະນາຄວາມຊໍານານດ້ານພາສາ, 152–53
  ການໃຊ້, ໃນການສອນ, 209–10
ການຢືນຢັນ, 76
  ການອະທິບາຍ, 82
  ວິທີປະຕິບັດ, 238
  ການຕຽມສໍາລັບ, 231–32
  *ເບິ່ງ* ການຮັບບັບຕິດສະມາ, ແລະ ການຢືນຢັນ *ນໍາອີກ*
ການວາງແຜນປະຈໍາວັນ, 173
ໃບສະຫລຸບລາຍງານທາງໂທລະສັບ, ໜັງສືອະທິບາຍ, 166
ການວາງແຜນປະຈໍາອາທິດ, ວິທີຈັດ, 170–73
ການເວົ້າລົມ, ແນວຄິດສໍາລັບ, ນໍາຄົນອື່ນໆ, 181
  ເຄື່ອງມືສໍາລັບການຊອກຫາ, 180–83
ການອະທິຖານ, ພະບັນຍັດຂໍ້ໜຶ່ງ, 86
  ການຊັ່ງຊາລະດັບ, 110
  ຄໍາແນະນໍາສໍາລັບ, 108–9
  ບົດບາດຂອງ, 44
  ໝາຍເຖິງການຮຽນຮູ້ຄວາມຈິງ, 44
  ແລະ ສັດທາ, ໃນການປ່ຽນໃຈເຫລື້ອມໃສ, 108–9
  ວິທີກ່າວ, 44

ການເອີ້ນ, ໃນສາດສະໜາຈັກ, 101
  *ເບິ່ງ* ການເອີ້ນຂອງຜູ້ສອນສາດສະໜາ *ນຳອີກ*
ການເອີ້ນຂອງຜູ້ສອນສາດສະໜາ, ແລະ ໜ້າທີ່ຮັບຜິດຊອບ, 4
  ພະລັງ ແລະ ອຳນາດຂອງ, 4–5
  ເພື່ອສອນພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່, 199–200
ການເອົາໃຈໃສ່, 142
ການເອົາລູກອອກ, ແລະ ການມີຄ່າຄວນສຳລັບບັບຕິດສະມາ, 236
ການຮັບໃຊ້, ໃນຖານະເປັນສະມາຊິກຂອງສາດສະໜາຈັກ, 101
  ໃນຖານະເປັນແຫລ່ງໜຶ່ງສຳລັບການຊອກຫາຜູ້ສົນໃຈ, 192–93
ການຮັບບັບຕິດສະມາຂອງຜູ້ປ່ຽນໃຈເຫລື້ອມໃສ, ການອະທິບາຍ, 235–36
ການຮັບບັບຕິດສະມາແທນຄົນຕາຍ, 100
ການຮັບບັບຕິດສະມາ ແລະ ການຢືນຢັນ, 9, 88
  ຄຳຖາມ ແລະ ຄຳຕອບກ່ຽວກັບ, 235–36
  ບັນທຶກ, 236–37
ການຮູ້ຈັກຮັບຜິດຊອບ, 173–74
ການຮຽນພາສາ, ແລະ ຫລັກໄວຍະກອນ, 152
  ກັບຄູ່ສອນສາດສະໜາ, 154
  ເຄື່ອງມືສຳລັບ, 151–52
  ເປົ້າໝາຍ, 151
  ແຜນສຶກສາ, 151–52
  ແລະ ການທ່ອງຈຳ, 152
  ຫລັກທຳແຫ່ງ, 150–51
ການຮຽນຮູ້, ວິທີໜຶ່ງຂອງການໄດ້ຮັບການເປີດເຜີຍ, 20
  ໂດຍພະວິນຍານບໍລິສຸດ, 20
  ໃນຖານະເປັນສະມາຊິກຂອງສາດສະໜາຈັກ, 102
ກາບະເລລາ, ວິກເຕີ ມານູເອນ, ເລື່ອງການປ່ຽນໃຈເຫລື້ອມໃສ, 181–82
ກິດຈະກຳກ່ຽວກັບຄຸນສົມບັດ, ການສຳຫລວດຕົວເອງ, 147
ກົດ, ເຊື່ອຟັງ ແລະ ນັບຖື, 95
ກົດ ແລະ ພິທີການ, ຫລັງຈາກບັບຕິດສະມາ, 96–102
  ວິທີສຶກສາ, 97
  ວິທີສອນກ່ຽວກັບ, 96
ກົດໝາຍບ້ານເມືອງ, ການເຊື່ອຟັງ ແລະ ການນັບຖື, 95
ຜູ້ປະສານງານຮ່ວມກັບຜູ້ສອນສາດສະໜາ, ໜ້າທີ່ຂອງ, 248
ກວດກາເບິ່ງການເປັນຄູ່ສອນສາດສະໜາ, 173
ກອງປະຊຸມເຂດ, ແລະ ສຶກສາ, ix
ກ້ອນນ້ຳແຂງ, ບັນຫາຄືກັນກັບ, 211–12


**ຂ**


ຂາດພື້ນຖານຊາວຄິດສະຕຽນ, ສອນພະກິດຕິຄຸນໃຫ້ຜູ້ທີ່, 215–16
ຂ່າວສານຂອງການຟື້ນຟູ, 35
  ແລະ ຄອບຄົວ, 184
  ຊີ້ແຈງ, 7–9
ຂ່າວສານຂອງຝ່າຍປະທານສູງສຸດ, v
ຂໍ້ຄວາມພະຍາກອນເຖິງວຽກງານການເຜີຍແຜ່, 12–14
ຂອງປະທານສັກສິດ, 100
ຂອງປະທານແຫ່ງການເວົ້າພາສາ, 155
ຂອງປະທານແຫ່ງພະວິນຍານ, 105
ຂອງປະທານແຫ່ງພະວິນຍານບໍລິສຸດ, 76, 105


**ຄ**


ຄິມໂບ, ສະເປັນເຊີ, ດັບເບິນຢູ, ເຖິງວຽກງານການເຜີຍແຜ່
  ແລະ ວຽກງານພະວິຫານ, 188
  ເຖິງການແຕ່ງຕັ້ງ, 4
ຄຸນສົມບັດ, ວິທີສຶກສາ, 136
  ຂອງພະຄິດ, 135
ຄຸນສົມບັດຂອງພະຄິດ, ຂອງປະທານຂອງພະເຈົ້າ, 135
  ຄວາມຈຳເປັນຕ້ອງພັດທະນາ, 135
  ວິທີພັດທະນາ, 143
ຄູສອນປະຈຳບ້ານ, 243
ຄົນທີ່ບໍ່ເຕັມກະສຽນ, ແລະ ບັບຕິດສະມາ, 235
ຄົນທີ່ອາດຈະກາຍເປັນຜູ້ສົນໃຈ, ໜັງສືອະທິບາຍ, 166
ຄຳສັນຍາຂອງພະວິນຍານບໍລິສຸດ, 105
ຄຳຖາມ, ແລະ ຄຳໝັ້ນສັນຍາ, 223
  ການໃຊ້, ໃນການສອນ, 207–8
  ວິທີຕອບ, ດ້ວຍພະຄຳພີມໍມອນ, 127
ຄຳຖາມຕໍ່ຈິດວິນຍານ, ແລະ ພະຄຳພີມໍມອນ, 125–26
ຄຳໝັ້ນສັນຍາ, ເປົ້າໝາຍຂອງ, 8–9
ຄຳໝັ້ນສັນຍາ, ແລະ ພອນ, 224
  ສ່ວນຈຳເປັນຂອງການກັບໃຈ, 221–22
  ເພີ່ມສັດທາ, 222
  ແລະ ການຕິດຕາມຜົນຕໍ່ໄປ, 222–27
  ແລະ ຄຳຖາມສະເພາະ, 223
ຄວາມໃຈບຸນ, 138
ຄວາມສູງສົ່ງ, 61
  ການອະທິບາຍ, 68
ຄວາມສຳເລັດ, ການອະທິບາຍ, 10–11
ຄວາມສຳເລັດຂອງຜູ້ສອນສາດສະໜາ, 10–11
ຄວາມດີ, 139

ຄວາມຖ່ອມຕົວ, 141

ຄວາມເປັນມະຕະ, 57–58
  ການອະທິບາຍ, 68
  ຈຸດປະສົງຂອງ, 35–36

ຄວາມເປັນອຳມະຕະ, ການອະທິບາຍ, 68
  ຊີ້ແຈງ, 61

ຄວາມຜິດຫວັງ, 11

ຄວາມເມດຕາ, ການອະທິບາຍ, 83

ຄວາມລອດ, ມີໄວ້ສຳລັບທຸກຄົນ, 100
  ການອະທິບາຍ, 69
  ແຜນແຫ່ງ, 54–62

ຄວາມຫວັງ, 137–38

ຄວາມຮັກ, 138

ຄວາມຮູ້, 139–140

"ຄອບຄົວ: ການປະກາດຕໍ່ໂລກ," 3, 99

ຄອບຄົວ, ຈຸດປະສົງຂອງ, 99

ຄອບຄົວຂອງພະເຈົ້າ, 35–36, 179–80

ຄອບຄົວ, ໄດ້ຮັບພອນໂດຍພະກິດຕິຄຸນ, 36
  ການສອນກ່ຽວກັບຄວາມສຳຄັນຂອງ, 182
  ພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່ເປັນພອນແກ່, 3

**ງ**

ເງິນສ່ວນສິບ, ກົດ, 92–93

ເງິນສ່ວນສິບ ແລະ ເງິນບໍລິຈາກ, ການບໍລິຈາກ, 94

**ຈ**

ຈຸດຊີ້ບອກ, ການອະທິບາຍ, 160
  ສຳລັບການປ່ຽນໃຈເຫລື້ອມໃສ, 160
  ວິທີຈັດຕັ້ງເປົ້າໝາຍສຳລັບ, 169

*ຈົ່ງສອນພະກິດຕິຄຸນຂອງເຮົາ*, ໃຊ້ໂດຍຜູ້ສອນສາດສະໜາ
  ປະຈຳຫວອດ ແລະ ຜູ້ນຳທັງຫລາຍ, xiii
  ວິທີໃຊ້, vii

**ສ**

ສັດທາ, ແລະ ການຊອກຫາຄົນເພື່ອສອນ, 179
  ໃນພະເຢຊູຄຣິດ, 72, 136–37
  ແລະ ການອະທິຖານ, 108–9

ສະໄບເດີ, ເລື່ອງ, 132

ສະພາຫວອດ, 172–73, 243–45
  ໜ້າທີ່ຮັບຜິດຊອບຕໍ່ການຜູກມິດ, 242
  ແລະ ຊ່ອຍເຫລືອຜູ້ປ່ຽນໃຈເຫລື້ອມໃສໃໝ່ຮັບໃຊ້ໃນ
    ການເອີ້ນທີ່ໂບດ, 245
  ແລະ ບຳລຸງລ້ຽງຜູ້ປ່ຽນໃຈເຫລື້ອມໃສໃໝ່, 244–45
  ແລະ ຜູກມິດກັບຜູ້ປ່ຽນໃຈເຫລື້ອມໃສໃໝ່, 244

ສະມາຄົມສະຕີສົງເຄາະ, 97–98

ສະມາຊິກ, ປ້ານທີ່ຈະເຮັດວຽກງານເຜີຍແຜ່, 186
  ຊ່ອຍຫາຜູ້ສົນໃຈ, 184–86
  ວິທີຊ່ອຍເຫລືອ, ນຳວຽກງານເຜີຍແຜ່, 186–87

ສະມາຊິກທີ່ບໍ່ເຂັ້ມແຂງ, ແຫລ່ງໜຶ່ງສຳລັບການຊອກຫາ
  ຜູ້ສົນໃຈ, 186
  ການຊ່ອຍໃຫ້ເຂັ້ມແຂງ, 241–42

ສະມາຊິກຜູ້ຖືກໄລ່ອອກຈາກສາດສະໜາຈັກ, ຈະໃຫ້ບັບຕິດ
  ສະມາຫລືບໍ່, 235

ສະມາຊິກໃໝ່, ແຫລ່ງໜຶ່ງສຳລັບການຊອກຫາຜູ້ສົນໃຈ, 186
  ການຊ່ອຍໃຫ້ເຂັ້ມແຂງ, 241–42
  ທີ່ຈະຮັບຟັງບົດຮຽນອີກ, 238
  ຜູ້ສອນສາດສະໜາທີ່ຈະຜູກມິດ, 238
  ຮັບຟັງບົດຮຽນ, 33

ສະມິດ, ໂຢເຊັບ, ແລະ ພາບທີ່ມາໃຫ້ເຫັນຄັ້ງທຳອິດ, 41–42
  ເຖິງການສອນທຸກຢ່າງທີ່ມີ, 180–81
  ເຖິງການປະກາດພະກິດຕິຄຸນ, 185
  ເຖິງການອາໄສພະວິນຍານ, 112–113
  ເຖິງການຮັບບັບຕິດສະມາດ້ວຍນ້ຳ ແລະ ດ້ວຍພະວິນ
    ຍານບໍລິສຸດ, 9
  ເຖິງຂອງປະທານແຫ່ງພະວິນຍານບໍລິສຸດ, 105
  ເຖິງຄວາມຈຳເປັນຕໍ່ການເປີດເຜີຍ, 103–4
  ເຖິງພະຄຳພີມໍມອນວ່າເປັນຫີນສຳຄັນ, 121
  ແລະ ການຟື້ນຟູ, 41–42

ສະມິດ, ໂຢເຊັບ ແອັບ, ເຖິງຄວາມຮູ້ສຶກຕອນເພິ່ນຮັບ
  ບັບຕິດສະມາ, 250

ສະມິດ, ໄຣລຳ, ເຖິງການສອນຫລັກທຳຂໍ້ທຳອິດ, 6

ສະອາດຈາກບາບ, 2, 6, 70–71

ສາດສະດາ, ຊີ້ແຈງ, 38
  ບົດບາດຂອງ, 41–42

ສິດທິ, 55, 56

ສິນລະລຶກ, 75

ສຶກສາ, ແຫລ່ງຕ່າງໆທີ່ອະນຸຍາດສຳລັບ, 25
  ຂໍ້ແນະນຳສຳລັບ, 22–23
  ຄຳແນະນຳສຳລັບການສຶກສາທີ່ໄດ້ຜົນ, 24–27
  ໃຫ້ໄດ້ຜົນ, 19
  ເມື່ອຕຽມສອນ, 21–24
  ເລີ່ມຕົ້ນດ້ວຍການອະທິຖານ, 19, 24

ສຶກສາພະຄຳພີ, ພະບັນຍັດຂໍ້ໜຶ່ງ, 87

ສູນປະຫວັດຄອບຄົວ, ແຫລ່ງໜຶ່ງສຳລັບການຊອກຫາ
  ຜູ້ສົນໃຈ, 189

ແສງສະຫວ່າງຂອງພະຄຣິດ, 104

ສົມສູ່ກັບຄົນເພດດຽວກັນ, ແລະ ການມີຄຸນຄ່າສຳລັບ
  ບັບຕິດສະມາ, 236

ເສີມສ້າງສາດສະໜາຈັກ, 180

ສວນເອເດນ, 57

ສອນ, ດັດແປງໃຫ້ເຂົ້າກັບຄວາມຕ້ອງການ, 200–1
  ກັບຄູ່ສອນສາດສະໜາ, 202–3
  ກັບສະມາຊິກ, 203–4
  ຄວາມຍາວຂອງການນັດພົບ, 202
  ຄວາມຍາວຂອງບົດຮຽນ, viii
  ຜູ້ທີ່ຂາດພື້ນຖານຊາວຄຣິດສະຕຽນ, 215–16
  ໂດຍພະວິນຍານ, 3–5
  ດ້ວຍຂໍ້ພະຄຳພີ, 204–6
  ດ້ວຍຄຳຖາມ, 207–8
  ໃນການເອີ້ນທີ່ໂບດ, 102
  ຝ່າຍປະທານສູງສຸດແນະນຳກ່ຽວກັບ, 199–200
  ພະກິດຕິຄຸນໃນຖານະເປັນຜູ້ສອນສາດສະໜາ, 199–200
  ແລະ ຊອກຫາ, 182–83
  ແລະ ທ່ອງຈຳ, viii
  ແລະ ຟັງ, 209–10
  ວິທີເລີ່ມ, 200–1

ຊ

ຊາຍໜຸ່ມ, ອົງການ, 98

ຊີວິດກ່ອນເກີດ, 55
  ການອະທິບາຍ, 68

ຊີວິດກ່ອນມະຕະ, ການອະທິບາຍ, 68

ຊີວິດນິລັນດອນ, ການອະທິບາຍ, 82

ຊີວິດຢູ່ໃນໂລກ, 57–58

ໂຊດ, ຟາແລງ ແລະ ນຽວດາເລັດ, ເລື່ອງການປ່ຽນໃຈ
  ເຫລື້ອມໃສ, 189

ຍ

ຍິງໜຸ່ມ, ອົງການ, 98

ຍຸກສະໄໝ, 36–38

ຍຸກສະໄໝ, ການອະທິບາຍ, 37

ຕ

ຕົ້ນໄມ້ແຫ່ງຊີວິດ, ກິດຈະກຳ, 2

ຖ

ຖານະປະໂລຫິດ, ອາໂລນ, 97–98
  ການຟື້ນຟູຂອງ, 41–42, 97–98
  ການອະທິບາຍ, 37
  ເມນຄິເສເດັກ, 97–98

ຖານະປະໂລຫິດແຫ່ງເມນຄິເສເດັກ, ຟື້ນຟູ, 41–42

ຖານະປະໂລຫິດແຫ່ງອາໂລນ, ຟື້ນຟູ, 41–42

ຖານະປະໂລຫິດ ແລະ ອົງການຊ່ອຍເຫລືອ, 97–98

ທ

ທິນແດວ, ວິວລຽມ, 52

ທີ່ປຶກສາຊັ້ນສູງປະຈຳສະເຕກ, ໜ້າທີ່ຂອງ, 246

ເທເລີ, ຈອນ, ເຖິງການສອນພຽງແຕ່, 206

ນ

ແນວຄິດສຳລັບການສຶກສາ ແລະ ການນຳໃຊ້, ວິທີໃຊ້, xii

ນຽວ ເອ ແມກສະແວວ, ເຖິງຄວາມຫວັງ, 137

ໜ້າສະຫລຸບຂໍ້ມູນ, ໃນ "*ຈົ່ງສອນພະກິດຕິຄຸນຂອງເຮົາ,*"
  xi–xii

ໜ້າທີ່ມອບໝາຍ, ທີ່ຈະສອນພະກິດຕິຄຸນທີ່ຟື້ນຟູຄືນມາໃໝ່, 1

ບ

ບັນທຶກ, ສຳລັບບັບຕິດສະມາ ແລະ ການຢືນຢັນ, 236–37

ບັນທຶກການສອນ, ໜັງສືອະທິບາຍ, 164

ບັນທຶກຄວາມກ້າວໜ້າ, ໜັງສືອະທິບາຍ, 165

ບັນຫາ, ຄວາມຈຳເປັນທີ່ຈະຊ່ອຍຜູ້ສົນໃຈແກ້ໄຂ, 213–14

ບັບຕິດສະມາ, ການເຊື້ອເຊີນໃຫ້ຮັບ, 45, 77
  ການຕຽມສຳລັບ, 231–32
  ຄວາມເໝາະສົມຂອງຜູ້ສະໝັກ, 235–36
  ຄວາມເໝາະສົມສຳລັບ, 232
  ຈຳເປັນສຳລັບການເປັນສະມາຊິກ, 74
  ດ້ວຍໄຟ, 76
  ບໍ່ຈຳເປັນສຳລັບເດັກນ້ອຍ, 74
  ພັນທະສັນຍາທຳອິດຂອງເຮົາ, 74–75

ບາເລີດ, ເອັມ ລັດໂຊ, ເຖິງເປົ້າໝາຍ, 169
  ເຖິງອຳນາດຂອງພະວິນຍານ, 107

ບາບ, ດັ່ງທີ່ມອງກັນໃນຫລາຍໆວັດທະນະທຳ, 71

ບຸດດາ (ໂກທາມາ), 53

ເບັນສັນ, ເອສະລາ ແທັບ, ເຖິງການຕອບຄຳຖາມ
  ກ່ຽວກັບພະຄຳພີມໍມອນ, 127
  ເຖິງການນຳພະກິດຕິຄຸນໄປສູ່ໂລກ, 2
  ເຖິງຄຳຖາມອັນສຳຄັນກ່ຽວກັບຈິດວິນຍານ, 125–6
  ເຖິງຄວາມສຳຄັນຂອງພະວິນຍານ, 200
  ເຖິງພະຄຳພີມໍມອນວ່າເປັນຫີນສຳຄັນ, 122
  ເຖິງວຽກງານ, 142

ບົດບາດຂອງຜູ້ສອນສາດສະໜາໃນການປ່ຽນໃຈ
  ເຫລື້ອມໃສ, 106–7

ບົດຮຽນ, ສຳລັບສະມາຊິກໃໝ່, 33
  ໃຊ້ສຳລັບສຶກສາ ແລະ ຝຶກຝົນ, 33
  ເພື່ອສອນຜູ້ສົນໃຈ, 33

ໃບລາຍງານປະຈຳອາທິດຂອງຜູ້ສອນສາດສະໜາ,
  ໜັງສືອະທິບາຍ, 168

## ປ


ປະຈັກພະຍານ, ສະແດງເລື້ອຍໆ, 225

ປະຕິທິນປະຈຳວັນຂອງຜູ້ສອນສາດສະໜາ, ຊີ້ແຈງ, 167–68

ປະຖົມໄວ, ອົງການ, 98

ປະທານຂອງສາດສະໜາຈັກ, ເຖິງວຽກງານການເຜີຍແຜ່, 12–14

ປະທານສະເຕກ, ໜ້າທີ່ຂອງ, 246

ປະທານເຜີຍແຜ່, ໜ້າທີ່ຂອງ, 245

ປະຫວັດຄອບຄົວ, ແຫລ່ງໜຶ່ງສຳລັບການຊອກຫາຜູ້ສົນໃຈ, 186–88

ປຶ້ມບັນທຶກການສຶກສາ, ຊີ້ແຈງ, x–xi

ປຶ້ມບັນທຶກປະຈຳເຂດ, ການອະທິບາຍ, 162
- ໃຊ້ເພື່ອຊອກຫາຜູ້ສົນໃຈເກົ່າ, 190–91

ເປົ້າໝາຍຂອງຜູ້ສອນສາດສະໜາ,
- ເປັນຕົວແທນຂອງພະເຢຊູຄຣິດ, 2

ເປົ້າໝາຍ, ໃນຖານະເປັນຜູ້ສອນສາດສະໜາ, 1

ເປົ້າໝາຍ, ແລະ ການວາງແຜນປະຈຳອາທິດ, 170–73
- ວິທີຈັດຕັ້ງ, 169


## ຜ


ຜູ້ແກ້ໄຂໃຫ້ດີຂຶ້ນ, 52

ຜູ້ສົນໃຈ, ຜູ້ສອນສາດສະໜາທີ່ຈະຕຽມ, ເພື່ອການສຳພາດ
- ສຳລັບບັບຕິດສະມາ, 232–33
- ຕັ້ງເປົ້າໝາຍເພື່ອ, 170–73
- ເພື່ອອ່ານພະຄຳພີມໍມອນ, 128–29

ຜູ້ສົນໃຈເກົ່າ, ແຫລ່ງໜຶ່ງສຳລັບການຊອກຫາຄົນເພື່ອສອນ, 190–91

ຜູ້ສອນສາດສະໜາປະຈຳຫວອດ, ໜ້າທີ່ຂອງ, 247
- ວິທີໃຊ້ *ຈົ່ງສອນພະກິດຕິຄຸນຂອງເຮົາ*, xii

ຜູ້ຖືກແນະນຳ, ຂໍ້ແນະນຳສຳລັບການເຮັດວຽກນຳ, 187–88

ຜູ້ຖືກແນະນຳຈາກການສື່ສານ, 187–88

ຜູ້ຖືກແນະນຳຈາກສູນກາງຂອງສາດສະໜາຈັກ, 187–88

ຜູ້ທີ່ຈະເປັນແອວເດີ, ແຫລ່ງໜຶ່ງສຳລັບການຊອກຫາຜູ້ສົນໃຈ, 186

ຜູ້ນຳສະເຕກ, ແລະ ວຽກງານການເຜີຍແຜ່, 241
- ໜ້າທີ່ຂອງ, 246

ຜູ້ນຳຖານະປະໂລຫິດ, ໜ້າທີ່ຂອງ, 246

ຜູ້ນຳເຜີຍແຜ່ປະຈຳຫວອດ, ໜ້າທີ່ຂອງ, 247

ຜູ້ນຳຫວອດ, ແລະ ວຽກງານເຜີຍແຜ່, 241
- ໜ້າທີ່ຂອງ, 245

ຜູ້ນຳອົງການຊ່ອຍເຫລືອ, ໜ້າທີ່ຂອງ, 246

ຜູ້ປ້ຽມສອນ, 243

ແຜນການເຜີຍແຜ່ຂອງຫວອດ, 248–49

ແຜນແຫ່ງຄວາມລອດ, 54–62
- ແຜນຜັງ, 62


## ຝ


ຝ່າຍປະທານສູງສຸດ, ເຖິງວຽກງານການເຜີຍແຜ່, 33–34


## ພ


ພະກິດຕິຄຸນ, 70–77
- ການຟື້ນຟູ, 41–42
- ກຳນົດຄວາມໝາຍຂອງ, 6, 82
- ສະໜອງຄວາມຕ້ອງການຂອງຄົນ, 1–2
- ເປັນພອນແກ່ຄອບຄົວ, 3, 37
- ເປົ້າໝາຍຂອງ, 6
- ພະກິດຕິຄຸນຂອງພະເຢຊູຄຣິດ. *ເບິ່ງ* ພະກິດຕິຄຸນ

ພະຄຣິດ, ແສງສະຫວ່າງຂອງ. *ເບິ່ງ* ແສງສະຫວ່າງຂອງພະຄຣິດ

ພະຄຣິດ. *ເບິ່ງ* ພະເຢຊູຄຣິດ

ພະຄຸນ, ການອະທິບາຍ, 82

ພະຄຳພີ, ການໝາຍ, 26
- ການໃຊ້, ໃນການສອນ, 204–5

ພະຄຳພີໄບເບິ້ນ, ສະໜັບສະໜູນພະຄຳພີມໍມອນ, 124

ພະຄຳພີມໍມອນ, ຄຳຕອບຕໍ່ຄຳຖາມຂອງຈິດວິນຍານ, 125–26
- ຈຸດປະສົງຂອງ, 43
- ສະໜັບສະໜູນພະຄຳພີ, 124
- ດຶງຜູ້ຄົນມາຫາພະເຈົ້າ, 126–27
- ເປັນພະຍານເຖິງພະເຢຊູຄຣິດ, 123
- ເປັນຫີນສຳຄັນ, 121–2
- ຫລັກຖານເຖິງການເປັນພະເຈົ້າຂອງພະເຢຊູຄຣິດ, 121
- ຫລັກຖານເຖິງການຟື້ນຟູ, 7, 43, 121
- ວິທີໃຊ້, 128–29
- ວິທີອ່ານ, ກັບຜູ້ສົນໃຈ, 128–29
- ອ່ານ, ເພື່ອຮຽນພາສາໃນເຂດເຜີຍແຜ່, 152–53

ພະເຈົ້າ, ການສອນຜູ້ບໍ່ໄດ້ເປັນຄຣິດສະຕຽນກ່ຽວກັບ, 37

ພະເຈົ້າ, ການນະມັດສະການທີ່ຖືກຕ້ອງ, 91

ພະເຈົ້າ, ພະບິດາເທິງສະຫວັນຂອງເຮົາ, 35–36, 58

ພະເຈົ້າຜູ້ເປັນພະບິດາ, ໄດ້ມາປາກົດຕໍ່ໂຢເຊັບ ສະມິດ, 41–42

ພະບັນຍັດ, 84–95
- ວິທີສຶກສາ, 85
- ວິທີສອນກ່ຽວກັບ, 84–85

ພະບັນຍັດສິບປະການ, ການຮັກສາ, 90

ພະບິດາເທິງສະຫວັນ, 35–36

ພະບິດາຜູ້ສະຖິດໃນສະຫວັນ, 58

ພະເຢຊູຄຣິດ, ໄດ້ປາກົດຕໍ່ໂຢເຊັບ ສະມິດ, 41–42

ການຊຶດໃຊ້ຂອງ. *ເບິ່ງ* ການຊຶດໃຊ້
ການຊ່ອຍຄືນຮຽນກ່ຽວກັບ, 54–55
ການປະຕິບັດຢູ່ໃນໂລກຂອງ, 38
ເປັນພະຜູ້ໄຖ່, 59–60, 70–71

ພະວາຈາແຫ່ງປັນຍາ, 91–92

ພະວິນຍານ, ພະລັງຂອງ, ໃນການປ່ຽນໃຈເຫລື້ອມໃສ, 105–6
ການກະຕຸ້ນຂອງ, 110–11
ຄວນນຳພາການສອນ, 200
ສອນໂດຍ, 3–4

ພະວິນຍານບໍລິສຸດ, ຂອງປະທານແຫ່ງ, 105
ການເປັນບຸກຄົນຂອງ, 104
ຮຽນຮູ້ໂດຍ, 20
ອຳນາດຂອງ, 104

ພະວິຫານ, ການນະມັດສະການ, 100

ພັນທະສັນຍາ, ການອະທິບາຍ, 82
ຊີ້ແຈງ, 74

ພັບ ໂລ, ເລື່ອງການປ່ຽນໃຈເຫລື້ອມໃສຜ່ານການຮັບໃຊ້, 193–94

ພາສາ, ຂອງປະທານແຫ່ງການເວົ້າ, 155

ພາສາຂອງເຂດເຜີຍແຜ່, ແລະ ພາສາເດີມ, 149
ຈະຕ້ອງມີການອຸທິດຕົນ, 150
ຕຽມຮຽນ, 149

ພິທີການ, ການອະທິບາຍ, 74

ພິທີບັບຕິດສະມາ, ວິທີດຳເນີນ, 237–38

ແພັກເກີ, ບອຍ ເຄ, ເຖິງການຮັບບັບຕິດສະມາດ້ວຍນ້ຳ ແລະ ໄຟ, 9
ເຖິງການບັງຄັບສິ່ງທາງວິນຍານ, 118
ເຖິງການຮູ້ຈັກພະວິນຍານ, 110–111, 114
ເຖິງແສງສະຫວ່າງຂອງພະຄິດ, 104
ເຖິງປະສົບການທາງວິນຍານ, 114
ເຖິງພະຄຳພີມໍມອນເປັນພະລັງຂອງການລ້ຽງດູ, 126
ເຖິງພະວິນຍານໃນການປ່ຽນໃຈເຫລື້ອມໃສ, 106–7
ເຖິງວິທີທີ່ການສຶກສາປ່ຽນການປະພຶດ, 21

ແພລີ, ແອວ ທອມ, ເຖິງການເຊື່ອຟັງ, 143

ພໍ່, ໜ້າທີ່ຂອງ, 99

ພົມມະຈັນ, ກົດຂອງ, 91

ພອນ, ແລະ ຄຳໝັ້ນສັນຍາ, 224

**ຟ**

ຟາວ, ເຈມ ອີ, ເຖິງຄວາມຫວັງ, 137–38
ເຖິງການສອນຢ່າງຊັດເຈນ, 206

**ມ**

ແມ່, ໜ້າທີ່ຂອງ, 99

ໂມຣາມັດ, 53

ມອນສັນ, ທອມມັດ ແອັດ, ເຖິງການສະແດງປະຈັກພະຍານ, 225
ເຖິງການສອນຮ່ວມກັບສະມາຊິກ, 203–4
ເຖິງການວັດແທກພາກປະຕິບັດ, 173
ເຖິງຄວາມອົດທົນ, 140
ເຖິງພາສາຂອງພະວິນຍານ, 155

**ຢ**

ຢັງ, ບະລິກຳ, ເຖິງການໄດ້ຮັບປະຈັກພະຍານ, 225–26

**ລ**

ລາຍການ. *ເບິ່ງ* ລາຍການປະຈຳວັນຂອງຜູ້ສອນສາດສະໜາ

ລາຍການປະຈຳວັນຂອງຜູ້ສອນສາດສະໜາ, viii

ລີ, ແຮໂລນ ບີ, ເຖິງຄວາມສຳຄັນຂອງຄອບຄົວ, 3
ເຖິງການສອນສຳລັບຄວາມເຂົ້າໃຈ, 217

ລູເທີ, ມາທິນ, 52

ໂລກວິນຍານ, 60

ລຳດັບຂອງການລາຍງານຂໍ້ມູນ, 162

**ວ**

ວັດທະນະທຳ, ຄວາມຈຳເປັນຕ້ອງຮຽນ, 155

ວັນຊະບາໂຕ, ການຮັກສາ, ສັກສິດ, 87

ວິນຍານຂອງເອລີຢາ, 188–89

ເວລາທີ່ໃຊ້, ຢ່າງໄດ້ຜົນ, 159

ວຽກງານເຜີຍແຜ່ສາດສະໜາ, ສະມາຊິກທີ່ຈະເຮັດ, 98

ວຽກງານສືບປະຫວັດຄອບຄົວ, 100

ເວີດລິນ, ໂຢເຊັບ ບີ, ເຖິງການໃຊ້ພະຄຳພີມໍມອນ, 129

ໄວຄະລິບ, ຈອນ, 52

**ອ**

ອະທິການ, 172–73
ຊີ້ນຳວຽກງານການເຜີຍແຜ່ໃນຫວອດ, 242
ໜ້າທີ່ຂອງຜູ້ສອນສາດສະໜາ, 247
ແລະ ວຽກງານການເຜີຍແຜ່, 185

ອັງກິດ, ຈຳເປັນຕ້ອງຮຽນ, 150

ອາຊະຍາກຳທີ່ຮ້າຍແຮງ, ແລະ ການມີຄ່າຄວນສຳລັບບັບຕິດສະມາ, 235–36

ອານາຈັກຊັ້ນກາງ, 61

ອານາຈັກຊັ້ນສູງ, 61

ອານາຈັກຊັ້ນຕ່ຳ, 61

ອານາຈັກແຫ່ງລັດສະໝີພາບ, 61

ອຸບປະກອນສຳລັບຜູ້ສອນສາດສະໜາ, ix

ໂອກ, ດາລິນ, ເອັດ, ເຖິງການເຊື້ອເຊີນໃຫ້ຄົນອື່ນໆມາ
    ຫາພະຄິດ, 9

ອິງຈີ້, 53

ອິດທິນ, 140

ອິດທິນຈີນເຖິງທີ່ສຸດ, 77, 102
    ການອະທິບາຍ, 82

ອຳນາດ, ຂອງຜູ້ສອນສາດສະໜາ, 4–5
    ການຟື້ນຟູ, 41
    ຖານະປະໂລຫິດ, ເສຍໄປ, 39–40

## ຣ

ຣັນເທີ, ຣາວເວີດ, ດັບເບີນຢູ, ເຖິງການຮູ້ຈັກພະວິນຍານ, 114

ຣິງລີ, ກໍດອນ, ບີ, ຜູ້ສອນສາດສະໜາທີ່ຈະຜູກມັດຜູ້ປ່ຽນໃຈ
    ເຫລື້ອມໃສເຂົ້າກັບສາດສະໜາຈັກ, 242
    ເຖິງການອະທິຖານຂອງຜູ້ສອນສາດສະໜາ, 109
    ເຖິງການອ່ານພະຄຳພີມໍມອນດ້ວຍການອະທິຖານ,
        126–27
    ເຖິງການຮັກສາຜູ້ປ່ຽນໃຈເຫລື້ອມໃສໄວ້, 241–42
    ເຖິງການຮັບໃຊ້, 193
    ເຖິງການຮັບຮູ້ພະວິນຍານ, 112
    ເຖິງຄວາມຕ້ອງການຂອງສະມາຊິກໃໝ່, 243–44
    ເຖິງສະມາຊິກຊ່ອຍເຫລືອຜູ້ສອນສາດສະໜາ, 184–85
    ເຖິງສັດທາ ແລະ ການອະທິຖານ, 108–109

ຮູບບູຊາ, 90

ເຮັດຄຸນງາມຄວາມດີ, 192–93

ເຮັດຕາມສາດສະດາ, 89

ຣໍແລນ, ແຈັບພີ, ອາ, ເຖິງການຮຽນຮູ້ພາສາ, 150
    ເຖິງການສອນດ້ວຍພະລັງ, 8
    ເຖິງການຟັງ, 209

# ໃຫ້ຈື່ຈຳສິ່ງນີ້ . . .

- ຈຸດປະສົງຂອງທ່ານຄື ທີ່ຈະນຳຜູ້ຄົນມາສູ່ພະຄິດ.
- ຕຽມຜູ້ຄົນໃຫ້ມີຄ່າຄວນສຳລັບການຮັບບັບຕິດສະມາ ດັ່ງໃນ Doctrine and Covenants 20:37 ແລະ ໃນຄຳຖາມສຳລັບການສຳພາດກ່ອນບັບຕິດສະມາ.

---

- ອະທິຖານເລື້ອຍໆສຳລັບຕົວທ່ານເອງ ແລະ ສຳລັບຄົນອື່ນໆ.
- ອາໄສພະວິນຍານເພື່ອສະແດງໃຫ້ທ່ານຮູ້ບ່ອນທີ່ຈະໄປຫາ, ສິ່ງທີ່ຈະເຮັດ, ແລະ ສິ່ງທີ່ຈະເວົ້າ.
- ເຊື່ອຟັງຢ່າງແນ່ວແນ່.
- ສຶກສາພາສາຂອງເຂດເຜີຍແຜ່ຂອງທ່ານທຸກວັນ.

---

- ວາງແຜນທຸກວັນ ແລະ ເອົາໃຈໃສ່ຕໍ່ຈຸດຊີ້ບອກ.
- ເຮັດວຽກງານຢ່າງໄດ້ຜົນຕະຫລອດມື້, ທຸກໆວັນ.

---

- ຂໍລາຍຊື່ຜູ້ຖືກແນະນຳຈາກ ***ທຸກໆຄົນ!***
- ໃຫ້ສອນຍາມທ່ານພົບ; ໃຫ້ຊອກຫາຍາມທ່ານສອນ.

---

- ອ່ານພະຄຳພີມໍມອນກັບຜູ້ທີ່ທ່ານສອນ.
- ສອນຜູ້ຄົນວ່າ ວິທີສຳຄັນທີ່ຈະຮູ້ວ່າ ໂຢເຊັບ ສະມິດ ເປັນສາດສະດາຂອງພະເຈົ້າ ຄືການອ່ານ ແລະ ອະທິຖານກ່ຽວກັບພະຄຳພີມໍມອນ.
- ຕິດຕໍ່ຫາຜູ້ສົນໃຈທຸກຄົນແຕ່ລະມື້.
- ສະແດງປະຈັກພະຍານເປັນປະຈຳ.
- ໃຫ້ສະມາຊິກມີໜ້າຢູ່ນຳເມື່ອສອນບົດຮຽນທຸກຄັ້ງ ຖ້າເປັນໄປໄດ້.
- ຕັ້ງວັນທີ ແລະ ເວລາໄວ້ສະເໝີສຳລັບບົດຮຽນຕໍ່ໄປ.
- ເຊື້ອເຊີນຜູ້ສົນໃຈທຸກຄົນໃຫ້ໄປຮ່ວມພິທີບັບຕິດສະມາ.
- ໃນຕອນທ້າຍບົດຮຽນແຕ່ລະບົດ, ໃຫ້ຈັດບາງສິ່ງໄວ້ໃຫ້ຜູ້ສົນໃຈທີ່ຈະອ່ານ ແລະ ໄຕ່ຕອງເພື່ອຕຽມສຳລັບການນັດພົບເທື່ອໜ້າ.

---

- ສ້າງມິດຕະພາບກັບສະມາຊິກໂດຍການຮັບໃຊ້ເຂົາເຈົ້າ ແລະ ເຮັດວຽກງານຮ່ວມກັບຜູ້ນຳຂອງຫວອດ.
- ຊ່ອຍຜູ້ນຳຂອງຫວອດໃນການຮັກສາສະມາຊິກໄວ້ ແລະ ພາຄົນກັບຄືນມາໂບດ.

---

- ຊ່ອຍທຸກຄົນທີ່ທ່ານສອນໃຫ້ເຮັດຄຳໝັ້ນສັນຍາອັນທີ່ຈະນຳການກັບໃຈມາໃຫ້ ແລະ ອັນທີ່ຈະເຮັດໃຫ້ສັດທາຂອງເຂົາເຈົ້າເຂັ້ມແຂງຂຶ້ນໃນພະຜູ້ຊ່ອຍໃຫ້ລອດ.
- ຮັກພະຜູ້ເປັນເຈົ້າ ແລະ ຮັບໃຊ້ພະອົງໃຫ້ຫລາຍທີ່ສຸດເທົ່າທີ່ທ່ານສາມາດເຮັດໄດ້.

THE CHURCH OF
JESUS CHRIST
OF LATTER-DAY SAINTS

LAOTIAN
4 02366 17331 0
36617 331